ນຳຮອຍ
ນັກສ້າງວິລະກຳປະຫວັດສາດ
ບັນດາເຜົ່າ

2014

ນຳຮອຍ

ນັກສ້າງວິລະກຳປະຫວັດສາດບັນດາເຜົ່າ

ຊີວິດ ແລະການເຄື່ອນໄຫວປະຕິວັດ
ຂອງນັກສ້າງວິລະກຳປະຫວັດສາດ

บำรอยบักส้างอิละภำปะทอัดสาดบันดาเผิ่า

ทิวหน้าโถງภาน, ภอดแภ้ และຂຽນแปງ: อาจาน คำใบ ยุนดาลาด
ผู้สำพาด และบันทึภ: อาจาน คำใบ ยุนดาลาด
ธ.ส.ดจ. อาจาน อຽງมาลา อาງมิอ
ຖ່າยพาบปะภอบ และจัดหน้า: ท. อิງปะเสิด
พิมคอมพิอเต๊้: ธ.ส.ดธ. อาจาน อຽງมาลา อาງมิอ
ออภแบบปิภ: ท. อิງปะเสิด
ติดตามโถງภาน และຂົນຂอายทຶນพิม: อาจาน นิຊິโมโตะ ฟูโตຊิ
(Mr. Nishimoto FUTOSHI)

จำนอนปิ้มพิมในຄັ້ງทิ I
จำนอนพิม 300 ทิอ

สาละบาน ໜ້າ

ຄຳນຳຂອງຫົວໜ້າໂຄງການ IV
ຮູບປະກອບ IX

ຊີວິດ ແລະການເຄື່ອນໄຫວປະຕິວັດ ຂອງນັກສ້າງວີລະກຳປະຫວັດສາດ
ລຸງອາອື່ງ 1
ແມ່ເຖົ້າບຸນຫຼ້າ 42
ລຸງບຸນມີ ພິມມະເສນ 66
ລຸງບຸນຕັ້ງ ພິມມະນີ 111
ລຸງບົວເຍີນ ເລຫວຽດມວງ 146
ປ້າມະນີວັນ ໂຄດຈັນດາ 184
ລຸງສີທັນ ໂຄດສຸວັນ 203
ລຸງສຸບິນ ແກ້ວຍອດສິງ 222
ລຸງຊຽງບຸນ ສີຫາຈັກ 267
ລຸງຊຽງກູ່ 297
ບົດສະຫຼຸບ 325

ຄຳເຫັນຂອງຫົວໜ້າໂຄງການ

ປະເທດລາວເປັນປະເທດທີ່ນ້ອຍ ຕັ້ງຢູ່ໃນແຫຼມອິນດູຈີນ, ປະຈຸບັນມີຈຳນວນພົນລະເມືອງປະມານ 6 ລ້ານຄົນ ແລະ ມີ 49 ຊົນເຜົ່າ ສ່ວນໜ້ອຍ, ທີ່ເວົ້າພາສາລາວໄຕ (ເປັນເຜົ່າສ່ວນຫຼາຍ), ເວົ້າພາສາມອນຂະແມ, ພາສາຈີນຕິເບດ-ພະມ້າ ແລະ ພາສາມົ້ງຢ້າວ.

ໃນຫຼາຍສັດຕະວັດຜ່ານມາ ປະຊາຊົນລາວບັນດາເຜົ່າລ້ວນແຕ່ທຸກຍາກລຳບາກຕະຫຼອດມາ ແຕ່ສະໄໝປູ່ຍ່າຕາຍາຍຈົນເຖິງເຊັ່ນລູກຫຼານເຫຼັນຍ້ອນມີການຮຸກຮານ ແລະ ຖືກຄອບຄອງຈາກພວກສັກດິນາ ແລະພວກຈັກກະພັດຕ່າງດ້າວ. ອາດຈະເວົ້າໄດ້ວ່າ ປະເທດລາວ ແລະປະຊາຊົນລາວບັນດາເຜົ່າ ເກືອບບໍ່ມີຊື່ສຽງໃນໂລກນີ້. ຈັກກະພັດຮຸກຮານ ແລະປົກຄອງດົນນານທີ່ສຸດກໍ່ແມ່ນ ຈັກກະພັດຝະລັ່ງເສດຈົນເກືອບ 60 ກວ່າປີ, ເຊິ່ງເຮັດໃຫ້ລາວເປັນປະເທດດ້ອຍພັດທະນາ ແລະຫຼ້າຫຼັງ, ທັງຖືກແບ່ງແຍກກັນເປັນຫຼາຍວົງໂຄດຕະກຸນເຜົ່າຄືໃນປະຈຸບັນ, ທັງໄດ້ເຮັດໃຫ້ລາວເສຍດິນແດນໃຫ້ປະເທດໃກ້ຄຽງຫຼາຍສົມຄວນ, ຊຶ່ງມາຮອດປະຈຸບັນຈົນບໍ່ສາມາດຈະທວງຖາມເອົາຄືນໄດ້. ຫຼັງຈາກນັ້ນກໍ່ແມ່ນຈັກກະພັດອາເມລິກາທີ່ເປັນມະຫາອຳນາດໃນໂລກມາແຊກແຊງ ແລະປົກຄອງລາວ. ເຖິງແມ່ນວ່າເຂົາຈະປົກຄອງລາວບໍ່ດົນປານໃດ ແຕ່ເຂົາມາເຮັດໃຫ້ສັງຄົມລາວ ແລະອິນດູຈີນດຸເດືອດໄປດ້ວຍສົງຄາມ, ເປັນສົງຄາມລ້າງຜານທີ່ສຸດ ພວກເຂົາໄດ້ນຳໃຊ້ກຳລັງໃຫຍ່ຫຼວງ ພ້ອມກັບອາວຸດທັນສະໄໝທຸກຊະນິດ, ເຊິ່ງພວກເຂົາຫວັງເຮັດໃຫ້ປະຊາຊົນລາວບັນດາເຜົ່າຕາຍດັບຕາຍວາຍ, ກັບໄປສູ່ລະບອບປ່າເຖື່ອນ ຢູ່ຮູຢູ່ຖ້ຳ ກິນກອຍກິນມັນ. ຕໍ່ກັບສົງຄາມຄັ້ງນີ້ໄດ້ເຮັດໃຫ້ປະຊາຊົນລາວບັນດາເຜົ່ານັບລວມທັງຂ້າພະເຈົ້າເອງ ກໍ່ລ້ວນແຕ່ຄິດວ່າຈະຕ້ອງຕາຍ, ຈະບໍ່ຍັງເປັນຄົນຕໍ່ໄປອີກແລ້ວ.

ແຕ່ຍ້ອນພັກປະຊາຊົນປະຕິວັດລາວ ອັນສະຫຼາດສ່ອງໃສນຳພາ, ລາວຈຶ່ງເກີດມີກຳລັງປະຕິວັດ ແລະນັບມື້ເຕີບໃຫຍ່ຂະຫຍາຍຕົວຈົນເຂັ້ມແຂງ

ທັງປະລິມານ ແລະຄຸນນະພາບ, ຈົນສາມາດໂຈມຕີສັດຕູທຸກຮູບແບບທຸກເວລາ ດ້ວຍຂະໜາດນ້ອຍ ແລະຂະໜາດໃຫຍ່, ຈົນເຮັດໃຫ້ພວກສັດຕູປະລາໄຊລຽນຕິດດ້ວຍຄວາມເຈັບແສບ, ດ້ວຍຄວາມອັບອາຍ ແລະ ໄດ້ບັງຄັບໃຫ້ພວກເຂົາຍອມຈຳນົນຖອນຕົວອອກຈາກປະເທດລາວຢ່າງບໍ່ມີເງື່ອນໄຂ, ໄດ້ເຮັດໃຫ້ປະຊາຊົນລາວບັນດາເຜົ່າ ເປັນເຈົ້າຂອງປະເທດຊາດຂອງຕົນເອງຢ່າງແທ້ຈິງ, ມີປະຊາທິປະໄຕແທ້ຈິງ ແລະມີຄວາມສະຫງົບສຸກ, ປະຊາຊົນລາວບັນດາເຜົ່າໄດ້ມີໂອກາດສ້າງສາພັດທະນາບ້ານເມືອງໃຫ້ກ້າວໄປສູ່ຄວາມຈະເລີນສີວິໄລຄືສູ່ມື້ນີ້. ແນວຄິດຄຽດແຄ້ນສັດຕູ, ຄວາມກ້າຫານຕີສັດຕູ, ແນວຄິດຍອມເສຍສະຫຼະເພື່ອປະເທດຊາດ, ເພື່ອບ້ານເມືອງດັ່ງກ່າວ ແມ່ນລ້ວນແຕ່ມີຢູ່ໃນດວງໃຈຂອງຄົນລາວທຸກຄົນ, ທຸກຊົນຊັ້ນ, ຊົນເຜົ່າ, ທຸກເພດໄວ, ແຕ່ຢູ່ໃນຂະບວນການປະຕິວັດດັ່ງກ່າວ ໄດ້ເກີດມີບຸກຄົນດີເດັ່ນທີ່ສຸດ, ຈົນກາຍເປັນນັກສ້າງວິລະກຳປະຫວັດສາດແຫ່ງ ສ ປ ປ ລາວ.

ປື້ມນຳຮອຍນັກສ້າງວິລະກຳປະຫວັດສາດບັນດາເຜົ່າເຫຼັ້ມນີ້ ເປັນປື້ມເຫຼັ້ມທຳອິດ ໃນບັນດາປື້ມປະຫວັດສາດລາວ ຊຶ່ງພວກເຮົາໄດ້ຄົ້ນຄວ້າ ແລະຂຽນໃນປີ 2003-2004 ແລະ ແປງຫຼາຍຫຼັບຫຼາຍຕ່າວ ຈຶ່ງໄດ້ເປັນເອກະສານສົມບູນນີ້. ການຄົ້ນຄວ້າ ແລະຂຽນຂອງພວກເຮົານີ້ໂດຍໄດ້ຮັບການສະໜັບສະໜູນ ແລະອຸປະຖຳດ້ານທຶນຮອນຈາກ ມູນນິທິໂຕໂຍຕ້າ (Toyota Foundation) ແຫ່ງປະເທດຍີ່ປຸ່ນ, ແລະ ໂດຍມີການຮ່ວມມືຄົ້ນຄວ້າຂອງນັກຄົ້ນຄວ້າປະຫວັດສາດ ແລະມະນຸດວິທະຍາຂອງຍີ່ປຸ່ນ,

ຈຸດປະສົງເປົ້າໝາຍຂອງຄະນະຄົ້ນຄວ້າ ຂອງພວກເຮົາທີ່ຕັ້ງ ໂຄງການດັ່ງກ່າວນີ້ຂຶ້ນກໍ່ເພື່ອຮວບຮວມບັນທຶກຂໍ້ມູນເຫດການ ແລະຊີວິດການເຄື່ອນໄຫວຂອງນັກປະຕິວັດ ໃນໄລຍະຕໍ່ສູ້ກູ້ຊາດຕ້ານຈັກກະພັດຕ່າງດ້າວໄວ້ໃຫ້ຄົນຮຸ່ນຫລັງ ນັກຮຽນ ນັກສຶກສາ ໄດ້ອ່ານແລະສຶກສາ ຮຽນຮູ້ດັ່ງນັ້ນການທີ່ພວກເຮົາພິມປື້ມໃນຄັ້ງນີ້ ແມ່ນບໍ່ໄດ້ພິມເພື່ອຈຳໜ່າຍ ແລະເປັນຂໍ້ມູນໃນການຄົ້ນຄວ້າ ໃຫ້ແກ່ນັກຄົ້ນຄວ້າ ແລະຜູ້ສົນໃຈວຽກງານ

ປື້ມເຫຼັ້ມນີ້ ໄດ້ປະກອບດ້ວຍບັນດາຂໍ້ມູນຕົວຈິງ ຈາກບັນດານັກສ້າງ

ວິລະກຳປະຫວັດສາດຂອງລາວບັນດາເຜົ່າທັງຍິງ ແລະ ຊາຍ ທີ່ຍັງມີຊີວິດໃນປະຈຸບັນ, ພວກເພິ່ນແຕ່ລະທ່ານດັ່ງກ່າວໄດ້ເລົ່າຄືນຊີວິດ ແລະ ການເຄື່ອນໄຫວຂອງຕົນເອງແຕ່ຍັງເປັນໄວເດັກຢູ່ນຳພໍ່ແມ່ຈົນເຖິງນັກປະຕິວັດ ຕໍ່ສູ້ກັບສັດຕູຜູ້ຮຸກຮານ ແລະ ພວກປະຕິການຂາຍຊາດລາວໃນເມື່ອກ່ອນ ດ້ານການທະຫານ ແລະ ດ້ານການເມືອງຈົນເຖິງມື້ປົດປ່ອຍທົ່ວປະເທດລາວໃນປີ 1975. ພວກເຮົາໄດ້ສຳພາດ, ໄດ້ບັນທຶກ ແລະ ຖ່າຍເອົາຮູບພາບຂອງພວກເພິ່ນແຕ່ລະທ່ານ ທີ່ເປັນຫຼຽນໄຊ, ຫຼຽນກາ ແລະ ໃບຍ້ອງຍໍປະເພດຕ່າງໆຊັ້ນຕ່າງໆ ແລະ ຂັ້ນຍ້ອງຍໍຕ່າງໆ ທີ່ເປັນຜູ້ຍ້ອງຍໍໃຫ້ພວກເພິ່ນແຕ່ລະທ່ານ ຢູ່ແຕ່ລະບ່ອນ ແຕ່ລະປີ ຢ່າງຄົບຖ້ວນທີ່ເປັນຫຼັກຖານສົມລະສູດ - ຢັ້ງຢືນເຖິງຜົນງານຕົວຈິງຂອງແຕ່ລະທ່ານດັ່ງກ່າວ.

ພວກເຮົາໄດ້ອີງໃສ່ບັນດາເອກະສານເລົ່າຄືນ ຂອງແຕ່ລະທ່ານ ມາຂຽນເປັນປະຫວັດການດຳລົງຊີວິດ ແລະ ການເຄື່ອນໄຫວຕໍ່ສູ້ຂອງແຕ່ລະທ່ານ ດ້ວຍວິທີການຮັກສາຄວາມເວົ້າ, ຮັກສາຄຳສັບໃນການພັນລະນາຂອງແຕ່ລະທ່ານ ຢູ່ແຕ່ລະບ່ອນ ແຕ່ລະເດືອນ ແຕ່ລະປີ; ພວກເຮົາພຽງແຕ່ຂຽນແປງໃຫ້ເປັນປະໂຫຍກ ແລະ ພະຍາງ ແລະ ການຈຸດຈ້ຳຕ່າງໆ ເພື່ອໃຫ້ເປັນປະໂຫຍກ ແລະ ພະຍາງລ່ອງຄ່ອງ, ເຮັດໃຫ້ບັນດາທ່ານຜູ້ອ່ານເຂົ້າໃຈໄດ້ງ່າຍກວ່າ ຕໍ່ກັບການດຳລົງຊີວິດ ແລະ ການເຄື່ອນໄຫວຕໍ່ສູ້ກູ້ຊາດອັນຍາວນານ ແລະ ລະອິດລະອຽດດ້ວຍນ້ຳໃຈເດັດດ່ຽວ ແລະ ຄວາມພິລະອາດຫານຂອງແຕ່ລະທ່ານ.

ໂດຍອີງໃສ່ສະພາບຕົວຈິງຂອງສົງຄາມ ແລະ ຂອງຂະບວນການຕໍ່ສູ້, ພວກເຮົາຈຶ່ງໄດ້ເລັງໃສ່ພາກກາງ ແລະ ພາກໃຕ້ຂອງລາວ, ໂດຍສະເພາະແມ່ນແຕ່ແຂວງສະຫວັນນະເຂດ ລົງຮອດ ແຂວງເຊກອງ ເພາະຢູ່ເຂດນີ້ມັນມີຫຼາຍບັ້ນຮົບທີ່ດຸເດືອດ ແລະ ຫຼາຍລົບຫຼາຍຕ່າວ, ກຳລັງສັດຕູໄດ້ບຸກລຸກແຮງທີ່ສຸດທັງອາກາດ ແລະ ທັງໜ້າດິນແຕ່ປີ 1964 ເຖິງປີ 1972. ເພາະວ່າຢູ່ເຂດນີ້ ມັນມີເສັ້ນທາງລັບດ້ານການທະຫານ ຈາກພາກເໜືອຫວຽດນາມລົງໃສ່ພາກໃຕ້ຫວຽດນາມ ແລະ ກຳປູເຈຍ ໂດຍຜ່ານດິນລາວໃນ 4 ແຂວງພາກກາງ

ແລະ ພາກໃຕ້. ພ້ອມກັນນັ້ນ ສັດຕູໄດ້ເອົາກຳລັງທະຫານຫຼາຍໝື່ນຄົນ ພ້ອມທັງອາວຸດຍຸດທະພັນອັນທັນສະໄໝ ບຸກບຽດຍຶດເອົາເສັ້ນທາງ ເລກ 9 ເພື່ອຕັດຂາດກຳລັງປະຕິວັດລາວ ແລະ ຫວຽດນາມ, ແນໃສ່ເຮັດໃຫ້ທະຫານ ແລະ ປະຊາຊົນຫວຽດນາມພາກເໜືອບໍ່ສາມາດຈະລົງໄປຊ່ວຍການປະຕິວັດຂອງປະຊາຊົນຫວຽດນາມໃຕ້ ເຮັດໃຫ້ທະຫານປົດປ່ອຍປະຊາຊົນລາວຢູ່ພາກເໜືອ ບໍ່ສາມາດລົງໄປຊ່ວຍພາກໃຕ້ລາວ, ໂດຍສະເພາະແມ່ນບັ້ນຮົບລາມເຊີນ 719 ໃນປີ 1971-72.

ໂດຍພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກປະຊາຊົນປະຕິວັດລາວ ແລະ ແນວລາວຮັກຊາດ, ທະຫານ-ພະນັກງານ ແລະ ປະຊາຊົນບັນດາເຜົ່າຢູ່ເຂດກາງ ແລະເຂດໃຕ້ ໄດ້ມີຄວາມສາມັກຄີກັນອັນເປັນຈິດໜຶ່ງໃຈດຽວ, ໄດ້ພ້ອມກັນຕີສັດຕູທີ່ບຸກລຸກເທິງອາກາດ ແລະ ໃຕ້ດິນດ້ວຍຄວາມອົງອາດກ້າຫານ, ອັນໄດ້ເຮັດໃຫ້ທຸກກຳລັງຂອງສັດຕູຖືກປະລາໄຊຢ່າງລຽນຕິດ, ໂດຍສະເພາະແມ່ນການຮ່ວມມືກັບກອງທັບຫວຽດນາມ ຕີດັບສູນກຳລັງພວກທະຫານທຸ່ນຮັບຈ້າງໄຊ່ງ່ອນຢູ່ບັ້ນຮົບລາມເຊີນ. ການມີໄຊຊະນະດັ່ງກ່າວຂອງທະຫານ, ພະນັກງານ ແລະປະຊາຊົນບັນດາເຜົ່າຢູ່ເຂດກາງ ແລະເຂດໃຕ້ລາວໄດ້ປະກອບສ່ວນອັນໃຫຍ່ຫຼວງທີ່ສຸດ ໃຫ້ແກ່ການຍຶດອຳນາດທົ່ວປະເທດໃນປີ 1975.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍ, ທົ່ວປະເທດລາວໄດ້ເກີດມີບັນດານັກສ້າງວິລະກຳປະຫວັດສາດຫຼາຍພັນຫຼາຍໝື່ນຄົນ, ແຕ່ຍ້ອນກາລະໂອກາດ ແລະດ້ານທຶນຮອນຖືກຈຳກັດ, ທັງຍັງເປັນການທົດລອງໃນການຄົ້ນຄວ້າ ແລະ ຂຽນປຶ້ມປະຫວັດສາດແບບນີ້, ດັ່ງນັ້ນ ພວກເຮົາຈຶ່ງສາມາດວາງເຂດຄົ້ນຄວ້າ, ເປົ້າໝາຍໃນການຄົ້ນຄວ້າແບບວົງແຄບຢູ່ເຂດກາງ ແລະເຂດໃຕ້, ແລະພວກເຮົາກໍ່ພຽງສາມາດ ຊອກຫາເປົ້າໝາຍສຳພາດຕົວຈິງ 40 ກວ່າທ່ານ, ແຕ່ພວກເຮົາໄດ້ຂຽນຕົວຈິງເບື້ອງຕົ້ນພຽງແຕ່ 10 ທ່ານກ່ອນ ຊຶ່ງບັນດາທ່ານເຫຼົ່ານີ້ເປັນຜູ້ເລົ່າຄືນຊີວິດ ແລະ ປະຫວັດການເຄື່ອນໄຫວຕໍ່ສູ້ຂອງຕົນລະອຽດກວ່າ ແລະ ເປັນລະບົບກວ່າ ເພື່ອເອົາເຂົ້າປຶ້ມເຫຼັ້ມນີ້

ມາຈັດພິມທົດລອງເບື້ອງຕົ້ນ ເພື່ອເປັນຂໍ້ມູນຄົ້ນຄວ້າ ສ່ວນເຫຼືອນັ້ນ ພວກເພິ່ນກໍ່ລ້ວນແຕ່ເປັນນັກສ້າງວິລະກຳປະຫວັດສາດທີ່ດີເດັ່ນເຊັ່ນດຽວກັນ, ແຕ່ພວກເຮົາໂຈະໄວ້ເທື່ອໜ້າ, ຖ້າມີໂອກາດ ແລະມີທຶນຮອນອີກ ແມ່ນພວກເຮົາກໍ່ຈະເອົາພວກເພິ່ນດັ່ງກ່າວເຂົ້າໃນປຶ້ມແບບນີ້ເຊັ່ນດຽວກັນ, ທັງພວກເຮົາກໍ່ຈະສືບຕໍ່ຄົ້ນຄວ້າ ແລະຂຽນເປັນປຶ້ມປະຫວັດແບບນີ້ຢູ່ພາກເໜືອຂອງລາວ.

ດັ່ງນັ້ນ ເມື່ອພວກທ່ານອ່ານປຶ້ມປະຫວັດສາດບຸກຄົນເຫຼັ້ມນີ້ ກໍ່ຈະຮູ້ໄດ້ບໍ່ຫຼາຍກໍ່ໜ້ອຍເຖິງຊີວິດ ແລະການເຄື່ອນໄຫວປະຫວັດຂອງແຕ່ລະທ່ານດັ່ງກ່າວ. ພ້ອມນີ້ພວກເຮົາກໍ່ຂໍອະໄພນຳ ຕໍ່ສິ່ງທີ່ຂາດຕົກບົກພ່ອງທີ່ບໍ່ສາມາດຫຼີກລ້ຽງໄດ້, ຫວັງວ່າພວກທ່ານຈະປະກອບຄວາມຄິດຄວາມເຫັນເພື່ອພວກເຮົາຈະໄດ້ປັບປຸງວິທີຄົ້ນຄວ້າ ແລະ ຂຽນໃນຄັ້ງຕໍ່ໄປໃຫ້ໄດ້ດີກວ່າເກົ່າ.

ຂໍຂອບໃຈ

ຄຳໃບ ຍຸນດາລາດ

24 / VII
ຫ້າມຈຳໜ່າຍ

ຜົນງານ ທີ່ເປັນຫຼຽນໄຊ ໃບຍ້ອງຍໍຂັ້ນຕ່າງໆ ທີ່ລຸງອາອຶ່ງຍັງຮັກສາໄວ້.

ຊີວິດໃນຄອບຄົວລຸງອາອຶ່ງ ມີບັນດາລູກຫຼານຂອງເພິ່ນທີ່ກຳລັງຟັງການ
ເລົ່າເລື່ອງຊີວິດໃນປາງສົງຄາມ.



ການເລົ່າເລື່ອງຊີວິດ ຂອງລຸງອາອຶ່ງໃນເວລາອອກເຮັດການປະຕິວັດ.

ບັນດາຫຼຽນໄຊຫຼຽນກາ ພ້ອມດ້ວຍໃບຍ້ອງຍໍຂັ້ນຕ່າງໆຂອງປ້າມະນີວັນ ໂຄດຈັນດາ.

ປ້າມະນີວັນ ໂຄດຈັນດາ ກຳລັງເລົ່າເລື່ອງຊີວິດຈິງຂອງຕົນເອງ ສະໄໝ ອອກເຮັດການປະຕິວັດ.

ເຮືອນລຸງຊຽງກູ່ ໃນປະຈຸບັນ ຢູ່ທີ່ບ້ານໂນນໄຊ ເມືອງພິນ ແຂວງ
ສະຫວັນນະເຂດ.

ລຸງຊຽງກູ່ນັກຮົບແຂ່ງຂັນ ກຳລັງເລົ່າເລື່ອງຊີວິດຈິງຂອງເພິ່ນໃນເວລາຕໍ່ສູ້
ກັບສັດຕູ ແລະເວລາຖືກສັດຕູຈັບ.

ບັນດາຜົນງານທີ່ເປັນຫຼຽນໄຊຫຼຽນກາຂັ້ນຕ່າງໆ ພ້ອມກັບຫຼຽນນັກຮົບແຂ່ງຂັນ.

ຊີວິດຂອງລຸງສີທັນ ໂຄດສຸວັນ ໃນສະໄໝອອກເຮັດການປະຕິວັດ ເພິ່ນມີແວວດ້ານດົນຕຣີ, ດັ່ງນັ້ນເພິ່ນຈຶ່ງໄດ້ເອົາກີລອນນ້ຳມັນ ແລະບັ້ງໄມ້ໃຜ່ມາປະດິດເປັນຊໍ ເພື່ອສີໃນຍາມພັກຜ່ອນ.

ເປັນທະຫານໃນໄວໜຸ່ມຂອງລຸງສີທັນ ໂຄດສຸວັນ.

ບັນດາຜົນງານທີ່ເປັນຫຼຽນໄຊ ຫຼຽນກາຂັ້ນຕ່າງໆພ້ອມດ້ວຍໃບຍ້ອງຍໍ
ຂອງເພິ່ນ.

ບັນທຶກການເລົ່າເລື່ອງຊີວິດຕົວຈິງຂອງລຸງຊຽງບຸນ ສີຫາຈັກ ໃນໄລຍະເວລາອອກເຄື່ອນໄຫວການປະຕິວັດ.

ຮູບເພິ່ນຕອນເປັນທະຫານໃນໄວໜຸ່ມຂອງເພິ່ນ.
ບັນດາຫຼຽນໄຊ ຫຼຽນກາຂັ້ນຕ່າງໆ ຂອງລຸງຊຽງບຸນ ສີຫາຈັກ.



ລຸງບົວເຍີນ ເລຫວຽດເມືອງ ເມືອງລະມາມ ແຂວງເຊກອງ ໄດ້ນຸ່ງຊຸດທີ່ຕິດຫຼຽນໄຊຫຼຽນກາຂັ້ນຕ່າງໆໃສ່.

ແມ່ເຖົ້າບຸນຫຼ້າ ກໍ່ແມ່ນນັກເຄື່ອນໄຫວການປະຕິວັດກັບແນວລາວອິດສະຫຼະ (ປະຈຸບັນຢູ່ບ້ານໜອງເລົ່າ ເມືອງທ່າແຕງ ແຂວງເຊກອງ).

ພັນໂທບຸນມີ ພິມພິເສນ ເພິ່ນກຳລັງເລົ່າເລື່ອງຊີວິດການເຄື່ອນໄຫວໃນໄລຍະອອກເຮັດການປະຕິວັດ.

24 / VII

ເພິ່ນໄດ້ເອົາຫຼຽນໄຊຫຼຽນກາຂັ້ນຕ່າງໆໃຫ້ຄະນະການຄົ້ນຄວ້າຂອງພວກເຮົາເບິ່ງເພື່ອເປັນຫຼັກຖານ.



ຄະນະຄົ້ນຄວ້າປະຫວັດສາດ ຂອງສະຖາບັນຄົ້ນຄວ້າວັດທະນະທຳກຳລັງ
ບັນທຶກ ແລະຈົດກ່າຍການເລົ່າປະສົບການໃນການເຄື່ອນໄຫວການຕໍ່ສູ້
ຂອງລຸງພົນໂທ ບຸນຕັງ ພົມມະນີ ໃນໄລຍະເຮັດການປະຕິວັດ.



ເຮືອນລຸງສຸບິນ ແກ້ວຍອດສີງ ນັກຮົບວິລະຊົນ ບ້ານໃໝ່ຫົວເມືອງ ເມືອງລະມາມ ແຂວງເຊກອງ.

ລຸງສຸບິນ ແກ້ວຍອດສີງ ກຳລັງເລົ່າເລື່ອງຊີວິດຈິງໃນເວລາອອກເຮັດການປະຕິວັດ ແລະການຕໍ່ສູ້ຂອງເພິ່ນໄລຍະສົງຄາມ. ປະຈຸບັນ ເພິ່ນໄດ້ເສຍຕາເບື້ອງໜຶ່ງ ແລະແຂນເບື້ອງໜຶ່ງຍ້ອນຖືກສະເກັດລະເບີດ.

<u>ບັນດາຮູບພາບທີ່ມີການກ່ຽວພັນກັນກັບປຶ້ມປະຫວັດສາດເຫລັ້ມນີ້</u>



ສັນພູນີ້ ຢູ່ເມືອງເຊໂປນທີ່ເປັນສະໜາມຮົບລາມເຊີນ 719 ຂອງສົງຄາມຫວຽດນາມ.

ຊາກອາຄານເກົ່າທີ່ຍັງເຫລືອຢູ່ນີ້ ແມ່ນເປັນຫ້ອງການ ແລະຄັງເງິນເກົ່າຂອງຝຣັ່ງທີ່ເຂົ້າມາປົກຄອງລາວ(ຕັ້ງຢູ່ເມືອງເຊໂປນເກົ່າ)

ຄະນະຄົ້ນຄວ້າປະຫວັດສາດຂອງພວກເຮົາໄດ້ຖ່າຍຮູບກັບຄອບຄົວໜຶ່ງທີ່ຍົກຍ້າຍມາແຕ່ຊຽງຂວາງ ຍ້ອນພໍ່ແມ່ເຂົາເຈົ້າເຄື່ອນໄຫວໄປກັບການປະຕິວັດ. (ທີ່ບ້ານເຊໂປນເກົ່າ)

ອາຈານຄຳໃບ ຍຸນນະລາດ ກຳລັງອະທິບາຍເຖິງສະຖານທີ່ຕັ້ງບ້ານເຊໂປນເກົ່າ ເຊິ່ງເປັນທີ່ຕັ້ງສຳນັກງານຂອງຝຣັ່ງທີ່ເຂົ້າມາລາວສະໄໝກ່ອນ.

ເຮືອນຂອງຊົນເຜົ່າຜູ້ໄທທີ່ບ້ານເຊໂປນເກົ່າ ຍັງບໍ່ທັນໄດ້ພັດທະນາຍ້ອນ
ເປັນເຂດທີ່ຖືກສົງຄາມທຳລາຍໜັກ.



ຄະນະຄົ້ນຄວ້າຂອງພວກເຮົາກຳລັງຂີ່ເຮືອຕາມສາຍເຊໂປນເພື່ອຕາມຫາ
ບຸກຄົນທີ່ໄດ້ສ້າງວິລະກຳ.

ເສດຍົນເຫລືອຈາກສົງຄາມ ທີ່ຊາວບ້ານນຳມາປະດິດເປັນເຮືອ.

ສາຍນ້ຳເຊໂປນກໍແມ່ນອີກເສັ້ນທາງໜຶ່ງທີ່ສຳຄັນໃນການລຳລຽງສະບຽງ
ອາຫານຮັບໃຊ້ກອງທັບ ແລະປະຊາຊົນໃນຂົງເຂດ ໃນປາງສົງຄາມ.

ຂົວອູ່ ຂ້າມນ້ຳເຊໂປນ ໄປຫາເມືອງນອງເພື່ອຕໍ່ໃສ່ເສັ້ນທາງໂຮຈິມິນ.



ຄະນະຄົ້ນຄວ້າຂອງພວກເຮົາຮັບປະທານອາຫານທ່ຽງຮ່ວມກັບຊາວບ້ານ
ຈະກີ ຊິນເຜົ່າບຣູ.



ເສົາຂົວເກົ່າທີ່ຍັງເຫລືອໄວ້ນີ້ ແມ່ນສະຖາປະນິກຂອງຝຣັ່ງສ້າງຂ້າມເຊບັງ
ຫຽງໃນສະໄໝກ່ອນເຊິ່ງເປັນເສັ້ນທາງຍຸດທະສາດສຳຄັນຂອງຝຣັ່ງ.

ຊາກຂົວຮ້າງສະໄໝຝຣັ່ງສ້າງຂ້າມນ້ຳເຊໂດນ ລະຫວ່າງສະຫວັນນະເຂດ
ໃສ່ສາລະວັນ ຖືກສົງຄາມທຳລາຍ ໃນໄລຍະສົງຄາມອາເມລິກາຮຸກຮານ.

ຄັງເງິນຂອງຝຣັ່ງໃນສະໄໝຝຣັ່ງເຂົ້າມາຕັ້ງສຳນັກງານຢູ່ບ້ານເຊໂປນເກົ່າ.

ຊາກປືນໃຫຍ່ທີ່ຍັງເຫລືອຈາກສົງຄາມອາເມລິກາເຮັດສົງຄາມກັບຫວຽດ
ນາມ.

24 / VII

ຫ້າມຈຳໜ່າຍ

ລຸງອາອຶ່ງ

ເຜົ່າບຣູຕຣີ

(ບ້ານອາຣໍ ເມືອງ ເຊໂປນ ແຂວງສະຫວັນນະເຂດ)

ລຸງອາອຶ່ງເກີດເມື່ອປີ 1916 ທີ່ບ້ານ ອາຣໍ, ເມືອງເຊໂປນ, ແຂວງສະຫວັນນະເຂດ, ເພິ່ນແຕ່ງງານເມື່ອອາຍຸໄດ້ 31 ປີ ແລະ ມີເມຍທັງໝົດ 3 ຄົນຄື: ຜູ້ທີໜຶ່ງ ຊື່ວ່າ ນາງປີ່ນ ແຕ່ງງານໃນປີ 1948, ມີລູກນຳກັນ 2 ຄົນ, ເປັນຜູ້ຊາຍທັງສອງ ຕາຍຜູ້ໜຶ່ງ. ຕໍ່ມາເມຍກໍໄດ້ເສຍຊີວິດ ເພິ່ນຈຶ່ງໄດ້ແຕ່ງງານກັບຜູ້ທີສອງ, ມີລູກນຳກັນ 2 ຄົນ ແລະເມຍຜູ້ທີສອງ ກໍໄດ້ເສຍຊີວິດອີກ, ເພິ່ນຈຶ່ງມາແຕ່ງງານກັບຜູ້ທີສາມ ໃນປີ 1997 ຊຶ່ງຍັງຢູ່ນຳກັນເທົ່າທຸກວັນນີ້ ຊື່ວ່ານາງທີ, ມີລູກນຳກັນຜູ້ໜຶ່ງເປັນຜູ້ຊາຍ. ພວກເພິ່ນມີອ້າຍເອື້ອຍນ້ອງຄີງນຳກັນທັງໝົດ 5 ຄົນ ຜູ້ກົກກໍແມ່ນອ້າຍອາກູມ, ຕໍ່ມາກໍແມ່ນເພິ່ນ (ອາອຶ່ງ), ຖັດຈາກເພິ່ນກໍແມ່ນນ້ອງຊາຍທັງສອງຄົນ ຊື່ວ່າ: ບຸນທີ ແລະຄຳຊາຍ ສຸດທ້າຍຈຶ່ງແມ່ນຜູ້ຍິງ ຊື່ວ່າ: ນາງເຍື່ອ. ນ້ອງຊາຍເພິ່ນ ຜູ້ທີສອງນັ້ນ ໄປເປັນທະຫານຢູ່ກອງພັນທີ 14 ກອງຮ້ອຍທີ 18 ຊຶ່ງແມ່ນ ສະຫາຍຄຳຕາເປັນຜູ້ຮັບຜິດຊອບກອງພັນທີ 14 ຄືກັນ ແຕ່ຢູ່ຄົນລະກອງຮ້ອຍ, ເຊິ່ງເວລານັ້ນ ຜູ້ບັງຄັບກອງພັນ ກໍແມ່ນສະຫາຍ ສີມພອນ.

ເວົ້າເຖິງຊີວິດຄອບຄົວພໍ່ແມ່ ອາອຶ່ງ ແລະຊີວິດອາອຶ່ງ ແຕ່ໃນໄວເດັກເມື່ອເພິ່ນ ອາຍຸໄດ້ 6 ປີ ກໍຍັງບໍ່ທັນຮູ້ຈັກຫຍັງ, ຊິໃຫ້ຮູ້ໄດ້ແນວໃດໃນເມື່ອພໍ່ແມ່ກໍບໍ່ໃຫ້ໄປໃສ ໃນສະໄໝເພິ່ນຍັງນ້ອຍນັ້ນ ແມ່ນຂ້ອນຂ້າງຈະຍາກຈົນ ເພາະວ່າຊັບສິນບັດຫຍັງກໍບໍ່ມີພໍປານໃດ. ເວົ້າລວມແລ້ວສະໄໝແຕ່ກີ້ ງົວຄວາຍໃນບ້ານນັ້ນກໍມີຢູ່, ແຕ່ກໍບໍ່ຫຼາຍປານໃດ, ສ່ວນງົວ ແມ່ນບໍ່ມີຊ້ຳ ມີແຕ່ຄວາຍປະມານ 10 ກວ່າໂຕນີ້ລະ. ສຳລັບຄອບຄົວພໍ່ແມ່ທຸກຍາກນັ້ນ ກໍ່ທຸກຍ້ອນນຳລູກນີ້ລະ ເພາະພໍ່ແມ່ຈະຕ້ອງຫາລ້ຽງລູກ ເພື່ອໃຫ້ເຕີບໃຫ່ຍໝົດທຸກ

ຄືນ. ຖ້າຈະເວົ້າເຖິງເລື່ອງທຸກຍາກ ໃນສະໄໝກ່ອນກັບດຽວນີ້ ແມ່ນບໍ່ຄືກັນດອກ ໃນສະໄໝຝຣັ່ງປົກຄອງນັ້ນ ສິ້ງເສື້ອຊິ່ນຸ່ງກໍ່ບໍ່ມີ, ມີແຕ່ຜ້ານຸ່ງກະຕ່ຽວ, ເສື້ອກໍ່ຂາດຫຼຸ່ງນ. ເວົ້າເລື່ອງຜ້າຫົ່ມນັ້ນແມ່ນບໍ່ຕ້ອງເວົ້າເຖິງເລີຍ ແມ່ນບໍ່ມີເລີຍລະ, ເວລາແຜ່ນແພທອງດມາ ພຽງຜືນນ້ອຍໆເທົ່ານັ້ນ ກໍ່ເອົາມາຫຍິບຕໍ່ກັນສາມສີ່ແຜ່ນ ໃຫ້ມັນໃຫຍ່ສໍ່າຜ້າອ້ອມນີ້ລະ ພໍໄດ້ຕູ້ມໃຫ້ລູກ[1]. ສະໄໝແຕ່ກີ້ສ່ວນຫຼາຍ ເພິ່ນກໍມີແຕ່ໄປທານໍາທອງດ ເພາະວ່າຄົນລາວກັບຄົນທອງດຕ່າງກໍ່ຖືກຂູດຮີດຈາກພວກຝຣັ່ງຄືກັນ. ຍ້ອນແນວນັ້ນ ເລື່ອງທຸກຍາກ ຈຶ່ງທຸກມາແຕ່ສະໄໝພໍ່ແມ່ພຸ້ນລະ. ຢູ່ດົນມາອາອື່ງ ນັບມື້ກໍ່ນັບໃຫ່ຍຂຶ້ນ ຈົນຮອດອາຍຸກະສຽນເອົາເມຍ ເລື່ອງອາຫານການກິນ ຕອນນີ້ກໍ່ມີພໍຢູ່ພໍກິນແດ່, ແຕ່ວ່າອາອື່ງຊິໜີປະຄອບຄົວກໍ່ບໍ່ໄດ້ເພາະວ່າບໍ່ມີໃຜຢູ່ນໍາພໍ່ແມ່ເພິ່ນ ແລະນ້ອງເພິ່ນກໍ່ຍັງນ້ອຍ, ສ່ວນອ້າຍຂອງອາອື່ງກໍ່ຢູ່ເຮືອນໜຶ່ງຕ່າງຫາກ. ຖ້າອາອື່ງບໍ່ລ້ຽງຄອບຄົວແລ້ວກໍ່ບໍ່ມີຜູ້ໃດ ເພາະຖັດຈາກອ້າຍຂອງອາອື່ງ ກໍ່ແມ່ນອາອື່ງໂລດ ທີ່ເປັນຜູ້ໃຫຍ່ແດ່. ສະນັ້ນ, ເພິ່ນຈໍາເປັນຕ້ອງໄດ້ລ້ຽງພໍ່ແມ່ແລະນ້ອງທຸກຄົນ. ເວົ້າເຖິງເລື່ອງຄວາມທຸກຍາກຂອງເພິ່ນນັ້ນມັນກໍ່ຍັງທຸກຍາກຢູ່, ແຕ່ວ່າ ບາດໃຫ່ຍຂຶ້ນມາສໍ່າໃດສໍ່າໜຶ່ງແລ້ວ ເພິ່ນພັດໄປທາງປະຕິວັດ ແລະເຮັດໄຮ່ພ້ອມ. ຫຼັງຈາກນັ້ນອາອື່ງກໍ່ຍັງສືບຕໍ່ເຮັດໄຮ່ນໍາພໍ່ແມ່ ຈົນເພິ່ນໄດ້ສ້າງຄອບຄົວແລ້ວ ກໍ່ຍັງເຮັດໄຮ່ນໍາພໍ່ຢູ່. ຢູ່ຕໍ່ມາ ອາອື່ງຈຶ່ງໄດ້ອອກໄປເຮັດໄຮ່ຢູ່ນໍາເມຍ, ເພາະວ່າ ພໍ່ແມ່ກໍ່ເຖົ້າແກ່ແລ້ວເຮັດຫຍັງກໍບໍ່ໄດ້ອີກແລ້ວ. ສະນັ້ນຈຶ່ງມີພຽງແຕ່ສອງຜົວເມຍອາອື່ງພາກັນເຮັດ. ສ່ວນພໍ່ແມ່ກໍ່ເປັນຜູ້ເບິ່ງແຍງລູກຂອງອາອື່ງ ເພາະວ່າປະເພນີຂອງຊົນຊາດພວກເພິ່ນແມ່ນຢູ່ນໍາກັນໄດ້ແລະອີກອັນໜຶ່ງ ກໍ່ແມ່ນເພື່ອອາໄສພໍ່ແມ່ນັ້ນ ເປັນຜູ້ອົບຮົມສັ່ງສອນລູກຫຼານ ເພາະວ່າເພິ່ນກໍເຄີຍມີບົດຮຽນ ທາງດ້ານການດູແລເດັກນ້ອຍແດ່. ແຕ່ຄາວອາອື່ງຍັງນ້ອຍກໍ່ມີແຕ່ພວກເພິ່ນນັ້ນທີ່ເປັນຜູ້ອົບຮົມສັ່ງສອນ, ບອກແລ້ວກໍ່ບອກອີກ ເຊິ່ງພໍ່ແມ່ໄດ້ບອກລູກຕະຫຼອດວ່າແນວນີ້: ໜຶ່ງບໍ່ໃຫ້ລັກ, ບໍ່ໃຫ້ປຸ້ນ, ບໍ່ໃຫ້ເຮັດມະລໍາມະລອຍ, ສອງມາ

---

[1] ສະໄໝແຕ່ກີ້ເມື່ອຮອດຍາມໜາວເຂົາເຈົ້ານອນຜີງໄຟ, ໄປໃສກໍ່ເອົາໄຟໄປນໍາເພື່ອດັງໄຟຜີງ.

ເພິ່ນກໍ່ຕ້ອງເປັນຄົນຮູ້ຜູ້ດີ, ບໍ່ໃຫ້ຜິດກັບໝູ່ກັບເພື່ອນ ແລະ ບໍ່ໃຫ້ເປັນໜີ້ເຂົາ, ຈາກນັ້ນອາອື່ງ ກໍຈື່ຈໍາເອົາຄວາມພໍ່ແມ່ບອກສອນ ພໍ່ແມ່ບອກສອນ ອາອື່ງແນວໃດ ອາອື່ງກໍ່ຟັງແນວນັ້ນ ແລະ ອາອື່ງກໍ່ຟັງຄວາມພໍ່ແມ່, ເພາະຄົນແຕ່ກີ້ແມ່ນຕ່າງດຽວນີ້ ເພາະເຂົາຈະຢ້ານພໍ່ແມ່. ສໍາລັບອາອື່ງ ແມ່ນຢ້ານພໍ່ຫຼາຍກວ່າຢ້ານແມ່, ເພາະຖ້າບໍ່ຟັງຄວາມແມ່ແມ່ນແມ່ຕີອິຫຼືບໍ່ແມ່ນຢອກອີກ. ຕອນອາອື່ງຍັງເປັນເດັກນ້ອຍ ອາອື່ງກໍ່ຍັງຖືກພໍ່ຕີຄືກັນ. ພໍ່ເພິ່ນບອກວ່າ ຕີໃຫ້ຈື່ແດ່ ແລະບອກຫຍັງກໍ່ຕ້ອງເຮັດ. ດ້ວຍເຫດນັ້ນລະ ອາອື່ງຈຶ່ງຢ້ານພໍ່ຫຼາຍກວ່າຢ້ານແມ່. ສ່ວນແມ່ຂອງອາອື່ງນັ້ນ ແມ່ນຍັງຮັກລູກ, ຍັງມັກເອົາໃຈ ແລະມັກເວົ້າຫຼິ້ນເວົ້າຢອກນໍາລູກຢູ່. ຕອນອາອື່ງ ຍັງບໍ່ທັນໄດ້ລູກໄດ້ເມຍນັ້ນ ແມ່ອາອື່ງສັ່ງໃຫ້ເຮັດຫຍັງອາອື່ງກໍ່ຕ້ອງເຮັດ. ຖ້າໄປລ້ຽງງົວຄວາຍ ກໍ່ໃຫ້ເອົາໃຈໃສ່ຕິດຕາມເບິ່ງຄັກແນ່ ຖ້າຄວາຍໄປກິນເຂົ້າໄຮ່ເຂົ້ານາ ຫຼືທໍາລາຍຜົນລະປູກໃນສວນເຂົາ ແມ່ນຕ້ອງໄດ້ເສຍໝູເສຍໄກ່ ເພາະຊົນຊາດພວກເພິ່ນ ແມ່ນເຂົາເຈົ້າຖືຮີດຄອງເຂັ້ມງວດ ແນວນັ້ນ [2]. ແມ່ເພິ່ນຍັງໄດ້ບອກຢໍ້າອີກວ່າ: ໃຫ້ໂຕເບິ່ງຄັກໆເດີ ເມື່ອເປັນແນວນັ້ນ ອາອື່ງຈຶ່ງໄດ້ປະຕິບັດຕາມຄໍາພໍ່ແມ່ບອກສອນມາຕະຫຼອດຈົນເຖິງປັດຈຸບັນນີ້.

ແຕ່ອາອື່ງຍັງນ້ອຍເລື່ອງຮຽນມົນຮຽນຄາຖາ ຫຼື ໝໍເຢົານັ້ນ ພໍ່ແມ່ຂອງເພິ່ນບໍ່ໄດ້ແນະນໍາ ແລະບໍ່ໄດ້ບັງຄັບໃຫ້ເພິ່ນຮຽນດອກ, ແຕ່ວ່າອາອື່ງນີ້ ລັກຮຽນສະເໜ່ໃສ່ຜູ້ສາວ [3] ຍ້ອນແນວນັ້ນ ຈຶ່ງມີຊູ້ມີແຟນຫຼາຍຄົນ. ນອກຈາກນັ້ນພວກອ້າຍນ້ອງອາອື່ງບໍ່ໄດ້ຮຽນຫຍັງໝົດ ແຕ່ປານນັ້ນ ນ້ອງຊາຍຂອງເພິ່ນຄໍາຊາຍ ກໍ່ຍັງຍິງຍົນຕົກຕັ້ງສອງຄັນພຸ້ນ, ຕົກຢູ່ຕາແສງຊຽງຮົ່ມ ບ້ານກະເນດຄັນໜຶ່ງ, ໄປຕົກຢູ່ບ່ອນອື່ນພຸ້ນຄັນໜຶ່ງ, ຄໍາຊາຍກໍ່ມີຊື່ສຽງຮອດສູນກາງພຸ້ນຕອນນັ້ນ. ພວກເພິ່ນສາມຄົນ ມີຜູ້ໜຶ່ງໄປນໍາກອງພັນທີ 14 ເຊິ່ງແມ່ນ

---

[2] ແປງຜີໄຮ່ ຜີສວນ ແລະ ເຄື່ອງປູກຂອງຝັງຂອງເຈົ້າໄຮ່ເຈົ້າສວນ.

[3] ຕາມປະເພນີຂອງເຜົ່າບຣູ ຜູ້ຊາຍໃຫຍ່ຂຶ້ນມາຕ້ອງຮຽນຄາຖາປ້ອງກັນຕົວ, ເພື່ອປົ່ນປົວຄົນອື່ນ. ສະເພາະແມ່ນມົນຊະນິດໜຶ່ງ ທີ່ຈົ່ມໃຫ້ຜູ້ສາວແລະຜູ້ສາວມັກໄລດ.

ອ້າຍສູນທອນເປັນຫົວໜ້າກອງພັນຢູ່ຊາຍແດນ. ໃນຕອນນັ້ນຢູ່ແຖວຊາຍແດນກໍແມ່ນພວກເພິ່ນນັ້ນລະໝາຍ. ເອີ! ສ່ວນເລື່ອງການແນະນຳໃຫ້ອາອຶ່ງຮຽນຈັກສານເຄື່ອງໃຊ້ສອຍຕ່າງໆນັ້ນ ແມ່ນພໍ່ເພິ່ນກໍໄດ້ບອກໃຫ້ຮຽນ ເປັນຕົ້ນແມ່ນໃຫ້ຮຽນສານກະຢັງ, ກະບຸງ, ກະຕ່າ ແລະ ກະດົ້ງຝັດທຸກຊະນິດ. ພໍ່ເພິ່ນກໍ່ສອນ ຖ້າແບບໃດບໍ່ຮູ້ອາອຶ່ງກໍ່ຕ້ອງຮຽນເຮັດນຳໝູ່ເພື່ອນ, ໄປຕັດໄມ້ມາຈັກຕອກແລ້ວກໍ່ຮຽນນຳໝູ່ເພື່ອນໃຫ້ໄດ້, ເຂົາບອກເຂົາສອນແນວໃດ ລູກກໍ່ຕ້ອງໄດ້ຮຽນເອົາໃຫ້ໝົດ. ອັນໃດກໍ່ໃຫ້ຮູ້ໄວ້ ຂອງແນວເຮົາທຸກຍາກ ບໍ່ມີເງິນບໍ່ມີຄຳເດ, ຄັນຊິໄປຫາຊື້ເຂົາກໍ່ຍາກ, ອັນນີ້ຂີ້ຮ້າຍແນ່ກໍ່ຢ່ານັ້ນ, ໂຕເອງເຮັດເອງໃຊ້ເອງບໍ່ເປັນຫຍັງ, ຖ້າວ່າມັນຂາດມັນເພກໍ່ເຮັດເອົາ ໃໝ່ຂອງແນວວ່າເຮັດເອງກໍ່ເປັນເດ. ພໍ່ເພິ່ນຍັງໄດ້ເວົ້າອີກວ່າ: ສິ່ງສຳຄັນກໍ່ຄື ໃຫ້ໂຕເອງໄດ້ຮູ້ໄວ້ແມ່ນດີແລ້ວ, ເພາະມັນຈະຊ່ວຍໃຫ້ເຮົາມີຢູ່ມີກິນພາຍພາກໜ້າ, ຖ້າເຈົ້າເຮັດຫຍັງ ມີແຕ່ຊື້ມັນກໍ່ເສຍເງິນເສຍຄຳ. ສ່ວນວ່າຕົບເຂົ້ານັ້ນ ອາອຶ່ງສານບໍ່ເປັນເທົ່າໃດດອກ ອາອຶ່ງສານໄປນຳນັບໄປນຳມັນຫຼີງ ອາອຶ່ງພັດຂີ້ຄ້ານນ້າງແລ້ວເພິ່ນກໍ່ຈົ່ມວ່າ: ບ໊ະໆ! ພ້າອາອຶ່ງຟັນຖິ້ມໃດນິເພາະມັນຍາກໂພດ, ອາອຶ່ງກໍ່ເລີຍບໍ່ເປັນສຳລັບອັນອື່ນນັ້ນ ອາອຶ່ງກໍ່ພໍເປັນໝົດຢູ່ດອກ ມາຮອດດຽວນີ້ ເພິ່ນກໍ່ໃກ້ຊິລືມແລ້ວ ເພາະເພິ່ນປະຖິ້ມມັນແຕ່ຕອນເພິ່ນໄປເຮັດການປະຕິວັດພຸ້ນ. ເອີ! ເວົ້າເລື່ອງການຫາຢູ່ຫາກິນໃນສະໄໝແຕ່ກີ້ກັບດຽວນີ້ ແມ່ນແຕກຕ່າງກັນຫຼາຍແຕ່ກີ້ການຫາກິນ ແມ່ນອາອຶ່ງເຮັດແຕ່ກະຕ່ຳ, ກະຕ່ຳແມ່ນຖືກໝູແລະສັດອື່ນໆກໍ່ຖືກເກືອບທຸກຊະນິດ ຖ້າວ່າອາອຶ່ງເຮັດໄມ້ໃຫຍ່ແດ່ ແມ່ນຖືກຮອດເຫງັ້ນພຸ້ນ. ສຳລັບການໄປຫາກິນທາງນ້ຳນັ້ນ ຫຼືວ່າບາງເທື່ອກໍ່ແມ່ນໃຊ້ສະຫວິງ, ບາງເທື່ອກໍ່ງົມດ້ວຍມື ໄດ້ມາກໍ່ເອົາໃຫ້ພໍ່ແມ່ຂອງເພິ່ນເຮັດກິນ ພໍ່ແມ່ເພິ່ນເປັນຜູ້ເຮັດແນວໃດກໍ່ຕາມໃຈພໍ່ ຢາກລາບໃຫ້ແມ່ເຮັດລາບ ຖ້າວ່າຢາກແກງ ກໍ່ໃຫ້ແມ່ ເຮັດແກງເທົ່ານັ້ນແລ້ວ ສ່ວນອາອຶ່ງແມ່ນເຮັດວຽກງານແນວອື່ນ.

ເວລານັ້ນ ອາອຶ່ງມີນ້ອງຜູ້ຍິງ 3 ຄົນ ແຕ່ວ່າເຂົາກໍ່ເສຍຊີວິດໝົດ. ເວົ້າເລື່ອງຮັກແພງແມ່ນອາອຶ່ງຮັກແພງນ້ອງຄືເວົ້າຫັ້ນແລ້ວ, ຂອງແນວວ່ານ້ອງນຸ່ງ

ເດ ໃຜກໍ່ຮັກຄືກັນຫັ້ນລະ, ແຕ່ຖ້ານ້ອງດື້ ອາອຶ່ງກໍ່ຕີ ບໍ່ວ່າຜູ້ຍິງຜູ້ຊາຍຄືກັນ ຂອງແນວວ່າພໍ່ອາອຶ່ງຮ້າຍໃຫ້ເພິ່ນ ແລະ ອາອຶ່ງກໍ່ຮ້າຍໃຫ້ເພິ່ນ ແລະ ອາອຶ່ງກໍ່ຮ້າຍນ້ອງຄືນເພື່ອໃຫ້ເຂົາຢ້ານ,ແຕ່ວ່າອາອຶ່ງກໍ່ຢ້ານອ້າຍອາອຶ່ງອີກ, ຂອງວ່າ ບາດອ້າຍຂອງເພິ່ນຮ້າຍກໍ່ສໍ່າພໍ່ເພິ່ນຮ້າຍຄືກັນ ອາອຶ່ງກໍ່ເລີຍຮ້າຍນ້ອງຕໍ່ອີກ ເພື່ອໃຫ້ນ້ອງຢ້ານ. ສ່ວນພໍ່ແມ່ຂອງອາອຶ່ງນັ້ນ ເມື່ອເວລາພວກລູກໃຫຍ່ພໍ່ຮູ້ຄວາມແລ້ວ ພໍ່ແມ່ກໍ່ບໍ່ຫ້າມຫຍັງດອກໃຜຢາກໄປຫຼິ້ນໄປທ່ຽວທາງໃດກໍ່ໄປແລະກໍ່ບໍ່ລະອາຍຄືແຕ່ກ່ອນເພາະເຂົາມີສິ້ງເສື້ອໃສ່, ບໍ່ຄືກັບອາອຶ່ງຕອນນັ້ນ, ບໍ່ແມ່ນຊິຄືດຽວນີ້,ດຽວນີ້ຖ້າບໍ່ມີສິ້ງເສື້ອນຸ່ງແລ້ວແມ່ນລະອາຍແລະບໍ່ໄປໃສ, ແຕ່ກີ້ອາອຶ່ງ ນຸ່ງຜ້າກະຕ່ຽວ ໄປນໍາກັນກັບເສື້ອແຂນສັ້ນ ແຂນກິ້ນກໍ່ພາກັນໄປໄດ້ແລ້ວ.

ເວລາໄປບຸນ ໄປງານ ບ້ານນັ້ນບ້ານນີ້ ພໍ່ແມ່ຂອງອາອຶ່ງ ກໍ່ບອກໃຫ້ລະວັງ ຢ້ານເຂົາໃສ່ຫວ້ານໃສ່ຢາ ພໍ່ແມ່ນ້ອງເພິ່ນ ເຕືອນບອກຕະຫຼອດຢາກໃຫ້ອາອຶ່ງລະວັງ ບໍ່ໃຫ້ກິນມະລໍາມະລອຍ ເພື່ອປ້ອງກັນ ຢ້ານຖືກຫວ້ານຖືກຢາ. ເພາະວ່າແຕ່ກ່ອນເຄີຍມີ, ໜຶ່ງລະແມ່ນຫວ້ານ ສອງລະແມ່ນໜ້ານ້ອຍຫັ້ນ [4] ທີ່ຖືວ່າເປັນອັນຕະລາຍຫຼາຍ. ຖ້າຜູ້ມີມົນຫວ້ານໜ້ານ້ອຍໃສ່ນີ້ມັນຕໍາເຮືອນຈິນບໍ່ຮູ້ຈັກ ບາງເທື່ອໃນປັດຈຸບັນນີ້ກໍ່ຍັງມີໜ້ານ້ອຍມົນເຂົາເຮັດຫັ້ນ, ບາງເທື່ອເຂົາກໍ່ໃສ່ຮອດກະດູກໄກ່ກະດູກອີ່ຫຍັງກໍ່ບໍ່ຮູ້ຈັກ, ຖ້າມັນຖືກນີ້ເລັບຕີນເລັບມືບໍ່ຍັງໄດ້ໃຫ້ມັນແຕກມັນຊຸອອກໝົດອີ່ຫຼີ. ຄວາມເຂົາຢ້ານຫັ້ນ ຖ້າເຂົາເຫັນຄົນມາແຕ່ບ້ານອາອຶ່ງພຸ້ນ ເຂົາກໍ່ປີນຂຶ້ນເທິງເຮືອນໂລດ. ເຂົາວ່າຢ່າຢູ່ລຸ່ມ ຖ້າຢູ່ລຸ່ມແມ່ນມັນຖືກແທ້, ບາງເທື່ອມັນຖືກໝອກມົນເຂົາກໍ່ແກ້, ເຂົາບໍ່ປ່ອຍໃຫ້ຕາຍດອກຂອງແນວວ່າມີຄົນຮັບໃຊ້ (ຜູ້ແກ້) ຢູ່ຖ້າວ່າມັນຖືກຄົນແລ້ວ ພວກໝໍມົນເຂົາເອົາຂີ້ແກ້ບ ເຫຼົ້າໄຫມາທາໃສ່ຕາມຕີນໂຕກໍ່ລຸກໄປໄດ້ໂລດແລ້ວ ຂອງແນວວ່າເຂົາລອງເຄື່ອງເຂົາຫັ້ນລະ, ເຂົາເຮັດໃຫ້ມັນມ່ວນຊື່ງ ເຂົາຢອກເຂົາຫຼິ້ນ

---

[4] ຫວ້ານ (ຢາເບື່ອ) ເຂົາເຮັດກັນເອງ,ແລ້ວໃສ່ເຫຼົ້າ,ໃສ່ນໍ້າ ຜູ້ໃດກິນແລ້ວແມ່ນຕາຍ. ສ່ວນຍິງກະດູກໄກ່ແມ່ນເຂົາຮຽນມົນ, ເປົ່າໃສ່ກະດູກໄກ່ແລ້ວມັນບິນໄປຖືກຄົນທີ່ເຂົາຢາກເຮັດໃສ່ນັ້ນ ເຈັບຫຼືຕາຍ.

ຂອງຄົນແຕ່ກໍ່ມັນມີອີ່ຫຼີ ຖືກກັນແທ້. ດ້ວຍເຫດນີ້ລະ ພໍ່ແມ່ຂອງອາອີ່ງຈຶ່ງໄດ້ຫ້າມ ບາດວ່າມັນຖືກແລ້ວລະອາຍເຂົາ ຂອງແນວວ່າມັນປ່ອງໄປທົ່ວທົບຄືກັນກັບຄົນເປັນບ້ານີ້ລະ ປ່ອງໄປ ຖ້າລົ້ມໃສ່ໄມ້ໃສ່ຕອກກໍ່ເປັນບາດເປັນແຜ, ລົ້ມທາງໃດກໍ່ບາດໝົດແລ້ວຂອງຖືກຫີນຖືກໄມ້. ອັນນີ້ພໍ່ແລະແມ່ອາອີ່ງກໍ່ໄດ້ບອກໄດ້ ເລົ່າຕະຫຼອດ. ໄປແລ້ວ ໃຫ້ລະວັງເດີລູກເດີ, ອັນໜ້ານ້ອຍນີ້ ເວລາມັນຖືກກໍ່ບໍ່ເຂົ້າປານໃດດອກ ເຂົ້າພຽງແຕ່ໜ້ອຍດຽວ ມັນພໍແຕ່ຕິດແປະໜັງໄວ້ຊື່ໆແຕ່ວ່າໜັງຫັ້ນຈະມີຮອຍບາດ, ຖ້າໝໍມີນເຫັນໝໍມີນເອົາອອກກໍ່ຖືວ່າແລ້ວໄປ, ຖ້າສິມ ມຸດວ່າບໍ່ໄປຫາໝໍເອົາອອກໃຫ້ ບາດກິນຜິດບໍ່ໄດ້ຂອງແນວວ່າ ມັນແມ່ນຫວ້ານກະຈາຍ ມັນຈະກະຈາຍໄປທົ່ວຮ່າງກາຍ ໂອຍ! ເຈັບບໍ່ໃຫ້ເວົ້າເລີຍ, ໂຕນີ້ເຮົາຕ້ອງລະວັງສຸດຂີດ ແນວນັ້ນເຂົາໃຫ້ລະວັງ ແລະພໍ່ແມ່ຂອງອາອີ່ງກໍ່ຕ້ອງໄດ້ເຕືອນຢູ່ຕະຫຼອດເວລາ.

ສຳລັບເຄື່ອງຂອງທີ່ປ້ອງກັນນັ້ນ ຜູ້ເຂົາມີກໍ່ມີ ແມ່ນເຂົາຖືໄປນຳ ເພື່ອປ້ອງກັນໂຕເອງເຊັ່ນ: ຂອງຄົງ,ຂອງກະຈາຍແລະເພັດສະຫຼີກ, ຖ້າເຂົາເອົາຕິດໂຕມາແທ້ຍິງກໍ່ບໍ່ຖືກ, ຖ້າຫາກຖືກກໍ່ບໍ່ເຂົ້າ. ແຕ່ກີ້ພໍ່ແມ່ມີຂອງເພິ່ນໃຫ້ອາອີ່ງຖືຢູ່, ຂອງແນວວ່າຖືໄວ້ປ້ອງກັນໜ້ານ້ອຍ ແລະມີນຍິງກະດູກໄກ່ໃສ່ຄົນອື່ນອີກດ້ວຍ. ນອກນັ້ນກໍ່ຍັງມີງ້ວນຫວ້ານທີ່ເປັນຢາເບື່ອເຊິ່ງເຂົາເຮັດຂຶ້ນເອງໃນສະໄໝກ່ອນນັ້ນ ແລະກໍ່ຫວ້ານກະຈາຍເຮັດໃຫ້ຄົນອື່ນເຈັບຕາຍ. ອີກຢ່າງໜຶ່ງກໍ່ແມ່ນຕົວໜາ ແຕ່ກ່ອນນີ້ແມ່ນຢູ່ນຳຊົນຊາດພວກເພິ່ນມີແຕ່ດຽວນີ້ໝົດແລ້ວໝົດໃນລະຫວ່າງເກີດເສິກສົງຄາມນີ້ລະ.

ສ່ວນເລື່ອງກິນເຫຼົ້າເມົາຢານັ້ນ ພໍ່ແມ່ຂອງອາອີ່ງກໍ່ເຄີຍຫ້າມບໍ່ໃຫ້ເກີດເລື່ອງຜິດຖຽງກັນ ອັນນີ້ແມ່ນບໍ່ເຄີຍມີດອກສຳລັບອາອີ່ງ ແຕ່ນ້ອຍຈົນເປັນບ່າວບໍ່ເຄີຍເກີດເລື່ອງແບບນັ້ນ ບໍ່ເຄີຍຜິດຖຽງກັນກັບໝູ່ເພື່ອນ ມີແຕ່ວ່າໄປບຸນແລ້ວກໍ່ກັບມາ, ເມື່ອມາຮອດເຮືອນແລ້ວກໍ່ເຮັດວຽກເຮັດງານທຳມະດາ. ຖ້າເວົ້າເຖິງເລື່ອງພົວພັນສັງຄົມແບບຊູ້ສາວບ່າວແພວ ສຳລັບອາອີ່ງກໍ່ມີຢູ່ ຕົກມາຍາມໄຮ່ຍາມສວນ ໝູ່ຂອງເພິ່ນຊັກຊວນໄປຫຼິ້ນບ້ານນັ້ນບ້ານນີ້ ໄປຫຼິ້ນສາວບ້ານນັ້ນ

ໄປຫຼິ້ນສາວບ້ານນີ້ ພໍ່ແມ່ຂອງເພິ່ນກໍ່ບໍ່ໄດ້ຫ້າມດອກ. ໂອຍ! ອາອຶ່ງຢາກໄປໃສໄປໄດ້ ຂອງແຕ່ກີ້ຜູ້ສາວບໍ່ແມ່ນໜ້ອຍ ພໍ່ແມ່ຂອງເພິ່ນປ່ອຍໄປໂລດແຫຼວ, ຂອງວ່າແມ່ຂອງເພິ່ນຢາກໄດ້ລູກໃພ້, ພໍ່ອາອຶ່ງ ວ່າ: ຖ້າໂຕພໍໃຈຜູ້ໃດ ໂຕຢາກເອົາກໍ່ເອົາໂລດ ບໍ່ໄດ້ຫ້າມດອກເດີ! ໂຕນີ້ແມ່ນເອົາຕາມແນວຄິດຈິດໃຈຂອງລູກຫຼານ. ພໍ່ຂອງອາອຶ່ງວ່າ: ຖ້າແມ່ນບຸນວາດສະໜາແລ້ວ ເປັນຂີ້ກາກຫຼືວ່າຂີ້ທູດກໍ່ແລ້ວແຕ່ຊິຕັດສິນໃຈ. ເອົາອັນນີ້ມັນຂຶ້ນກັບຈິດໃຈຂອງລູກ ພໍ່ແມ່ເພິ່ນບອກລະ. ຢາກໄດ້ດີກໍ່ຫາເອົາດີຫັ້ນແລ້ວ ບ່ອນຮັ່ງມີ ຫຼືວ່າທຸກຍາກ ແນວໃດຂີ້ຮ້າຍຫຼືງາມກໍ່ຕາມໃຈລູກມັກກໍ່ເອົາແນວນັ້ນ. ພໍ່ແມ່ຂອງອາອຶ່ງຍັງບອກອີກວ່າ: ຢ່າເຮັດມະລຳມະລອຍ ຖ້າຜິດຖຽງກັນ ກໍ່ຢ່າເຕະຢ່າຕີກັນ, ຂອງແນວວ່າມັນຮັກກັນແລ້ວຈຶ່ງເອົາກັນ, ມີຫຍັງກໍ່ໃຫ້ຄ່ອຍສຶກສາອົບຮົມກັນ ຢ່າເຕະ ຢ່າຕີເຂົາລູກເອີຍ ແລະ ກໍ່ຢ່າມີເມຍສອງຄົນສາມຄົນບາດດຽວເດີ[5]. ບັນຫານີ້ພໍ່ຂອງອາອຶ່ງເວົ້າແລ້ວເວົ້າອີກ, ຂອງແນວວ່າອາອຶ່ງໄປຕິດສາວບ້ານນີ້ ແລະ ກໍ່ໄປຕິດສາວບ້ານນັ້ນອີກ. ສຳລັບອາອຶ່ງເອງແມ່ນຖືທຳມະດາ ເພາະຜູ້ສາວເຂົາບໍ່ຮູ້ດອກ. ໂອ! ແນວນີ້ແລ້ວຕິດຜູ້ສາວຫຼາຍຄົນ, ບາດຊິເອົາແທ້ໆຈັກຊິເອົາບ່ອນໃດ, ບາດນີ້ເກີດວິນວາຍໃນຈິດໃຈແລ້ວ. ແຕ່ກີ້ເຂົາກໍ່ບໍ່ໄດ້ປັບໄໝ, ຄັນບໍ່ມັກກໍ່ຢ່າເຂົາ ເວົ້າຂອງແນວວ່າເງິນອາອຶ່ງປະໃຫ້ເຂົາແລ້ວກໍ່ຢ່າ. ຜູ້ຍິງແຕ່ກ່ອນເຂົາຍອມປະເຂົາບໍ່ໄດ້ວິນວາຍ ຫຼືບໍ່ໄດ້ເປັນຂໍ້ຄວາມດອກ. ບາດອາອຶ່ງເອົາແທ້ພັດເອົາຄົນໃນບ້ານເອງ, ກິນໄກ່ໃນລົກເຈົ້າຂອງເອງ.

ແຕ່ວ່າອາອຶ່ງ ບໍ່ໄດ້ມີເມຍນ້ອຍເມຍຫຼວງ. ໂອ! ບັນຫານີ້ ພໍ່ແມ່ເພິ່ນເຄີຍ ບໍ່ຮ້າຍວ່າເພິ່ນບ່ອນໃດ ໂຕບໍ່ຖືກໃຈກໍ່ບໍ່ເອົາແລ້ວຢ່າໄປເຮັດມະລຳມະລອຍ. ໃນຕໍ່ມາພໍ່ຂອງອາອຶ່ງພັດບອກໃຫ້ສ້າງຄອບຄົວ, ພໍ່ຂອງອາອຶ່ງວ່າເອົາຍາມໂຕຍັງໜຸ່ມຍັງແໜ້ນນີ້ລະດີ ພໍຈະມີເວລາສ້າງສາພັດທະນາແດ່ ເຮັດຫຍັງກໍ່ເຮັດໄດ້ ແຕ່ຕອນຍັງແຂງແຮງນີ້ລະ, ຖ້າວ່າໂຕເຖົ້າແລ້ວຈຶ່ງເອົາມັນກໍ່ລຳ

[5] ແຕ່ກີ້ແຕ່ກ່ອນນີ້ມີປະເພນີເອົາເມຍຫຼາຍຄົນ, ສ່ວນຫຼາຍແມ່ນເອົາເມຍສອງ ສ່ວນໜ້ອຍບໍ່ເອົາຮອດ 3–4 ຄົນ.

ບາກຢູ່. ແຕ່ເວລານັ້ນອາອື່ງຍັງມ່ອນຢູ່, ບໍ່ທັນຢາກໄດ້ເທື່ອ, ຍັງຢາກມ່ອນໄປໜ້າເລື້ອຍໆ. ແຕ່ ພໍ່ຂອງເພິ່ນບໍ່ໄດ້ບັງຄັບໃຫ້ເອົາເມຍ, ບໍ່ໄດ້ບັງຄັບໃຫ້ເອົານາງນັ້ນນາງນີ້, ມີແຕ່ພໍ່ແມ່ຂອງເພິ່ນວິຈານວ່າ ອາອື່ງຫຼິ້ນຫຼາຍ ມີຜູ້ແສ້ຜູ້ສາວຫຼາຍເທົ່ານັ້ນ. ແຕ່ກ່ອນຊົນຊາດຂອງເພິ່ນບໍ່ໄດ້ປັບໄໝ ບາງເທື່ອອາອື່ງກໍ່ຫຼິ້ນຈົນຜູ້ສາວເຂົາຈົນຖືພາຄາທ້ອງແລ້ວ ອາອື່ງປະກໍ່ມີ, ບາດຜູ້ມາຫຼິ້ນຕາມຫຼັງແລ້ວເປັນຜູ້ຮັບຜິດຊອບ. ແຕ່ກີ້ເອົາເມຍ 2-3 ຄົນກໍ່ໄດ້. ຕົວຢ່າງ: ຍາຕາແສງພະລອງນີ້ ເອົາເມຍຮອດ 6-7 ຄົນ. ອາອື່ງກໍ່ຄືກັນ ຖ້າຢາກເອົາຮອດ 4 ຄົນກໍ່ໄດ້ຄ່າດອງ ແຕ່ກ່ອນອາອື່ງຫາໄດ້ແຫຼ້ວ. ຖ້າອາອື່ງເອົາ 7 ຄົນກໍ່ໄດ້ຢູ່ໃນເຮືອນຫຼັງດຽວໂລດ, ແຕ່ວ່າເພິ່ນບໍ່ເອົາ, ເພິ່ນບໍ່ນຶກບໍ່ຢາກເຮັດແນວນັ້ນ, ຖ້າອາອື່ງຢາກເອົາເມຍຫຼາຍຄົນ ພໍ່ເພິ່ນກໍ່ບໍ່ໄດ້ຫ້າມດອກ, ຂໍພຽງແຕ່ວ່າກຸ້ມເຂົາເຈົ້າ. ອາອື່ງມີເມຍ 3 ຄົນ, ຕາຍຜູ້ນີ້ເອົາຜູ້ນັ້ນ ບໍ່ໄດ້ເອົາບາດດຽວ.

ໄລຍະຕໍ່ມາອາອື່ງເລີ່ມພົວພັນສັງຄົມ. ເລື່ອງຫຼິ້ນນຳກັນລະຫວ່າງບ່າວບ້ານນັ້ນ ໝູ່ຄູ່ບ້ານນີ້ ຮັກແພງກັນມີຄວາມສະໜິດສະໜົມກັນ, ເລື່ອງຄວາມອາຄາດບາດໝາງກັນ ອາອື່ງບໍ່ມີເຄີຍມີດອກ ພວກເພິ່ນມີແຕ່ຮັກແພງກັນຕະຫຼອດມາ. ເພາະວ່າອາອື່ງບໍ່ມັກເປັນຖ້ອຍເປັນຄວາມກັນ. ໝູ່ຄູ່ຂອງອາອື່ງທີ່ຮັກແພງກັນ ສະໜິດສະໜົມກັນ ຢູ່ບ້ານດຽວກັນກໍ່ມີຫຼາຍ, ເພາະວ່າອາອື່ງໄປບ້ານນັ້ນບ້ານນີ້ ເຂົາກໍ່ເອີ້ນໃສ່ໂລດ, ເຂົາສະໜັບສະໜູນອາອື່ງແທ້ໆ ເພາະວ່າອາອື່ງບໍ່ໄດ້ເຮັດຜິດຫຍັງກັບເຂົາ, ບໍ່ໄດ້ເຮັດແນວນີ້ແນວນັ້ນ, ບໍ່ເວົ້າແຂງກະດ້າງ, ບໍ່ເວົ້າຮ້າຍ ບອກສອນເຂົາບໍ່ຮູ້ກໍ່ບອກຈົນເຂົາຮູ້. ໝູ່ຄູ່ອາອື່ງກໍ່ຍັງຢູ່ຜູ້ທີ່ຮັກແພງກັນນັ້ນ, ເຮັດການປະຕິວັດກໍ່ເຮັດນຳກັນ, ມີຜູ້ຕາຍກໍ່ຕາຍໄປແລ້ວ, ຜູ້ຍັງກໍ່ມີຢູ່, ດຽວນີ້ຍັງຢູ່ບ້ານພະລອງຜູ້ໜຶ່ງ. ເວລາອາອື່ງເຮັດການປະຕິວັດ ແມ່ນອາອື່ງເປັນກຳມະການກອງຫຼອນ, ໝູ່ຂອງເພິ່ນກໍ່ຢູ່ນຳກັນນີ້ລະ. ສ່ວນກັບຜູ້ຍິງເວລາພວກເພິ່ນຢູ່ນຳກັນ ຢູ່ບ້ານຢູ່ຊອງ ແມ່ນຊ່ວຍກັນເວລາຖາງໄຮ່ຖາງສວນ, ເວລາຮູດເຂົ້າໄຮ່, ເຊິ່ງເວລານັ້ນຍັງບໍ່ທັນເປັນຊູ້ເປັນແຟນກັນ, ຜູ້ທີ່ສະໜິດສະໜົມ ກວ່າໝູ່ແມ່ນມີຫຼາຍນັບບໍ່ໄດ້, ບາງເທື່ອສະໜິດສະໜົມ 2 ຄອບຄົວ, 5

ຄອບຄົວ ໝາຍຄວາມວ່າຊ່ວຍເຫຼືອກັນ ເອົາແຮງງານຊ່ວຍກັນຕະຫຼອດທັ້ນໜາ. ຕອນເວລາອາອື່ງສ້າງຄອບຄົວໃໝ່ໆນັ້ນ, ສະເພາະຄອບຄົວຂອງອາອື່ງແມ່ນຫຍຸ້ງຍາກຫຼາຍ ຍ້ອນໄດ້ຮັບຜົນກະທົບຈາກການຂູດຮີດຂອງພວກຝຣັ່ງ, ເປັນຕົ້ນແມ່ນເກນໄປເປັນກູລີ, ເວລານັ້ນຖືກພວກມັນບັງຄັບຫຼາຍດ້ານ. ຍ້ອນແນວຄິດຄຽດແຄ້ນ ອາອື່ງຈຶ່ງໄປນຳອິດສະຫຼະ.

ເອີ! ເວລາອາອື່ງໃຫຍ່ແລ້ວ ແມ່ນເຫັນອິດສະຫຼະແລ້ວ, ອາອື່ງຈຶ່ງຕັດສິນໃຈຈິນວ່າໄດ້ໜີປະບ້ານປະເຮືອນ ໄປຢູ່ບ້ານໝູ່ທີ່ບ້ານສະດຶງ ເຊິ່ງແມ່ນຈຸດເລີ່ມຕົ້ນຂອງການປະຕິວັດ ເຊິ່ງພະນັກງານບໍ່ໄດ້ເລືອກບ້ານໃດ, ບ້ານອາອື່ງມັນກໍ່ມາຢູ່ບ້ານອາອື່ງ ຮອດ 3-4 ເດືອນພຸ້ນ. ເວລາອາອື່ງໄປນຳອິດສະຫຼະທັ້ນ ພໍ່ແມ່ຂອງເພິ່ນກໍ່ບໍ່ໄດ້ເວົ້າຫຍັງ ມີແຕ່ອາອື່ງເວົ້າແນວນີ້ ຊິໄປທາງໃດ ພໍ່ແມ່ກໍ່ເອົາຕາມແນວຄິດເພິ່ນໝົດ ພໍ່ແມ່ອາອື່ງເວົ້າວ່າ: ພວກເຮົາທຸກແທ້ລູກເອີຍ. ພວກເຮົານີ້ ມັນທຸກຈິນ. ແລ້ວອາອື່ງເວົ້າ ກັບພໍ່ແມ່ຂອງເພິ່ນວ່າ ຢາກໄປທາງທ່ວງດນາມພີ້, ເພາະວ່າຕອນນັ້ນທ່ວງດນາມກໍ່ມາເຄື່ອນໄຫວການປະຕິວັດລຽນຕິດ ອາອື່ງເຫັນຂະບວນການເຂົາມາແຮງ, ແລ້ວອາອື່ງກໍໄປນຳເຂົາທ່ວງດນາມພຸ້ນ, ອາອື່ງຄຽດຍ້ອນເຂົາເຕະເຂົາຕີທໍລະມານ ພໍ່ແມ່ຂອງເພິ່ນທັ້ນແລ້ວ. ເວລານັ້ນອາອື່ງກໍ່ໄດ້ໄປເປັນກູລີໃຫ້ຝຣັ່ງ (ກູລີເຮັດທາງນີ້ເດ) ເຂົາຈຶ່ງເຕະຕີທໍລະມານ ຍ້ອນວ່າອາອື່ງ ເຮັດຄຽດແຄ້ນແຮງ ອາອື່ງ ຈຶ່ງມີທ່າອ່ຽງໄປທາງປະຕິວັດ. ພວກອາອື່ງ 4 ອ້າຍນ້ອງໄດ້ໄປທາງປະຕິວັດໝົດ ບໍ່ມີຈັກຄົນເລີຍທີ່ໄປນຳຝ່າຍຂວາ. ເວລານັ້ນອາອື່ງຢູ່ບ້ານສະດຶງພຸ້ນ ເຊິ່ງແມ່ນບ້ານຊົ່ວຄາວ, ບ້ານເກົ່າບ້ານເດີມຂອງອາອື່ງແມ່ນບ້ານອາຮໍ. ອາອື່ງໄປຢູ່ບ້ານສະດຶງທັ້ນແມ່ນໄປລີ້ພວກຝ່າຍຂວາ, ເພາະເຂົາສົງໄສວ່າອາອື່ງໄປລ້ຽງອິດສະຫຼະ, ຈຶ່ງໄດ້ຫຼົກໜີ ປານນັ້ນກໍ່ຍັງຖືກຈັບໄດ້.ເວລານັ້ນອາອື່ງອອກໄປນຳອິດສະຫຼະແລ້ວ ມີແຕ່ອ້າຍຂອງອາອື່ງ ແລະອາອື່ງລະໄປ, ໄປເຮັດການປະຕິວັດຕໍ່ສູ້ກັບຝ່າຍຂວາ. ບາດນີ້ທັ້ນອາອື່ງຈິນໄດ້ປະບ້ານລະ. ອັນນີ້ແມ່ນສະໄໝອາເມລິກາ

ແລ້ວເດ, ປີ 1961, ຕໍ່ມາໃນປີ 1963 ພວກເພິ່ນໄດ້ມາຕັ້ງຢູ່ບ້ານນີ້, ຢູ່ບ້ານເກົ່າຈົນຮອດມື້ເຂົາຂ້າ ລຸງອາອື່ງ.

ຕົກມາໃນປີ 1972 ຄອບຄົວຂອງລຸງອາອື່ງ ແມ່ນຊວຍຫຼາຍ ເສຍເງິນຄຳກໍ່ຫຼາຍໃນການປິ່ນປົວພໍ່ຂອງເພິ່ນໂຊເດ ເວລານັ້ນອາອື່ງກໍ່ຍັງຢູ່ແຂວງພົ້ນ. ລຸງສະມວຍກໍ່ບອກອາອື່ງວ່າ: ເບິ່ງດູ ເຈົ້າຄວນເມືອແກ້ໄຂວຽກຄອບຄົວກ່ອນສາ. ເວລານັ້ນເມຍຂອງອາອື່ງຫາກໍຕາຍໃໝ່ໆ, ແລ້ວລູກເພິ່ນກໍ່ຍັງນ້ອຍໆຢູ່ຜູ້ໜຶ່ງ, ສ່ວນອີກຜູ້ໜຶ່ງນັ້ນຕາຍແລ້ວ. ອີກບັນຫາໜຶ່ງພໍ່ຂອງເພິ່ນກໍ່ເຖົ້າແກ່ແລ້ວຊ້ຳບໍ່ພໍພັດມັກເປັນໄຂ້ຢູ່ເລື້ອຍໆ, ການປິ່ນປົວພໍ່ຂອງເພິ່ນນັ້ນກໍ່ເສຍເງິນຄຳຫຼາຍແລ້ວ ຢາກໃຫ້ພໍ່ດີ ເພິ່ນກໍ່ບໍ່ດີ ຈັກຊິເຮັດແນວໃດ. ຊັບສິນບັດຂອງພໍ່ແມ່ເພິ່ນເຊັ່ນ: ມີງົວຄວາຍ ແລະ ເງິນຄຳທີ່ພໍ່ຂອງເພິ່ນປັນໃຫ້ນັ້ນກໍ່ໝົດ. ບາດນີ້ຈັກຊິເຮັດແນວໃດ ພໍ່ຂອງເພິ່ນໂຊ, ພໍ່ເພິ່ນເປັນເຈັບເປັນໄຂ້ຢູ່ແນວນີ້. ໃນເວລານັ້ນມີສິ່ງຄານແດ່ ຈຳເປັນຕ້ອງໄດ້ເອົາງົວຄວາຍນີ້ຈ້ຳໃຫ້ພໍ່, ແຕ່ວ່າກໍ່ບໍ່ດີ. ພວກເພິ່ນເສຍຄວາຍ 2 ໂຕ ເຮັດໃຫ້ພໍ່ ໝູ່ໄກ່ຫັ້ນບໍ່ນັບ, ແນວວ່າຮັກແພງເດ, ຊິເຮັດແນວໃດພໍ່ກໍ່ຮັກແພງເດ, ເພິ່ນລ້ຽງອາອື່ງແຕ່ຍັງນ້ອຍໆພຸ້ນ ບາດອ້າຍຂອງອາອື່ງ (ອ້າຍອາງູມ) ເພິ່ນກໍ່ໄປທົ່ວທິບ, ເພິ່ນກໍ່ໜີປະລູກປະເມຍໄປ ຄືກັນກັບອາອື່ງ. ພວກອາອື່ງກໍ່ບໍ່ຮູ້ວ່າບ່ອນອ້າຍໄປແມ່ນທາງໃດ, ຍ້ອນລາວໄປກັບຫວຽດນາມເດ ຈັກພວກເພິ່ນໄປທາງໃດ ບໍ່ໄດ້ຢູ່ເປັນບ່ອນ. ຊຸມອາອື່ງສ່ວນຫຼາຍພັດຢູ່ເປັນບ່ອນ. ອ້າຍຂອງອາອື່ງກໍ່ຢູ່ເປັນບ່ອນຄືກັນ ແຕ່ຢູ່ກັບຫວຽດ, ແຕ່ບໍ່ຮູ້ຈັກເພິ່ນຢູ່ບ່ອນໃດ.

ພໍດີໃນປີ 1972ນັ້ນ, ເມຍຂອງອາອື່ງກໍ່ເສຍຊີວິດແລະພໍ່ກໍ່ເສຍຊີວິດໃນປີນັ້ນ. ຄຳສັ່ງສອນຂອງພໍ່ແມ່ ຂອງເພິ່ນເຄີຍສັ່ງສອນອາອື່ງຍັງຈື່ໄດ້ດີ ແລະຈື່ບໍ່ລືມທີ່ວ່າ: ບໍ່ໃຫ້ຜິດກັນກັບອ້າຍນ້ອງ, ກັບໄທບ້ານໄທເມືອງ, ຄັນຜິດກັນແລ້ວຢູ່ບໍ່ໄດ້ ໝູ່ຄູ່ກໍ່ບໍ່ນັບຖື ແລະບໍ່ຮັກແພງ, ອັນນີ້ລະແມ່ນຈຸດໜັກ ທີ່ຄວນໃສ່ໃຈ. ເຂົາຊິເວົ້າແນວໃດກໍ່ຢ່າ, ຊິດ່າໂຕແນວໃດກໍ່ຕາມ, ເຂົາຊິຂ້າເຈົ້າ, ຂ້າລູກຂ້າຫຼານກໍ່ໃຫ້ເຂົາຂ້າສາ, ຢ່າຕອບເຂົາວ່າຊັ້ນ. ແຕ່ວ່າອາອື່ງ ພັດວ່າໂຕເອງນີ້ເຮັດ

ນຳບໍ່ໄດ້, ເຂົາຂ້າລູກຂ້າຫຼານຂອງອາອື່ງ ຄືກັນກັບເຂົາຂ້າລຸງຂອງເພິ່ນຫັ້ນລະ ເພິ່ນແລະອິດບໍ່ໄດ້. ບາດນີ້ຕິກມາຮອດສະໄໝການປະຕິວັດກໍ່ຄືກັນ, ເຂົາກໍ່ຢ້ານເຂົາກໍ່ນັບຖືອາອື່ງຄືກັນ, ຄັນອາອື່ງຫາກເຮັດແນວບໍ່ດີໃສ່ເຂົາຄືກັບຜູ້ອື່ນໆ ແນ່ນອນອາອື່ງກໍ່ຢູ່ບໍ່ດີຄືກັນ, ແລະກໍ່ຍາກຖ້າຜິດກັນບໍ່ພໍ 10 ມື້ດອກ ເຂົາຂ້າເຈົ້າໂລດລະ. ເພາະສະນັ້ນພໍ່ແມ່ຂອງອາອື່ງ ຈຶ່ງບໍ່ຢາກໃຫ້ລູກຜິດຂ້ອງຕ້ອງຖຽງກັນ, ບໍ່ໃຫ້ເປັນປໍລະປັກກັນ, ອັນນີ້ອາອື່ງຈື່ດີທີ່ສຸດ, ອາອື່ງໄປໃສ ໄທບ້ານໄທເມືອງເພິ່ນກໍ່ຮັກກໍ່ແພງອາອື່ງ. ອາອື່ງເວົ້າວ່າ ໂອ! ຄັນເວົ້າເລື່ອງຄວາມທຸກຄວາມຍາກນີ້ ແມ່ນທຸກແຕ່ເຊັ່ນພໍ່ເຊັ່ນແມ່ຫັ້ນແລ້ວ ກາຍວ່າທຸກຈັກຊິເຮັດແນວໃດແລ້ວ. ຕອນນັ້ນອາຍຸເພິ່ນກໍ່ພຽງ 7-8 ປີ ເທົ່ານັ້ນ ຊິເຮັດຫຍັງກໍ່ບໍ່ໄດ້, ພໍດີສະໄໝຝຣັ່ງເຂົ້າມາປົກຄອງ ແລະມັນເກນໄປເປັນກູລີເຮັດທາງ. ແຕ່ກີ້ເຂົາເອີ້ນວ່າເປັນທາງນ້ອຍຊຶ່ງເປັນທາງເລກ 9 ໃນສະໄໝນີ້ ແລ້ວບ່ອນເຂົາຂຸດໄມ້ສໍ່າກະພຸຍ ຝຣັ່ງບັງຄັບໃຫ້ພໍ່ແມ່ປະຊາຊົນ, ເວລານັ້ນທວງດກໍ່ຢູ່ນຳແຖວນີ້ລະ ພວກອາອື່ງກໍ່ຫຼຽວໄປຫຼຽວມາເບິ່ງເຂົາເຮັດ. ເວົ້າເລື່ອງທຸກກະທຸກຄືຫຍັງນີ້. ພໍ່ແມ່ນີ້ທຸກບໍ່ໃຫ້ເວົ້າ ທັງເຂົາເຕະເຂົາຕີເວົ້າລວມໃນສະໄໝຝຣັ່ງປົກຄອງຫັ້ນລະ, ການເຮັດທາງນັ້ນແມ່ນບໍ່ມີກຳນົດເລີຍ ເພື່ອຊິແລ້ວໃຊ້ເວລາດົນເປັນເດືອນເລີຍຈຶ່ງແລ້ວກໍ່ມີ, ແລ້ວບ່ອນນີ້ກໍ່ຍ້າຍໄປບ່ອນໃໝ່ ເອົາຢູ່ຈັ່ງຊັ້ນ ແຕ່ກີ້ຢູ່ບ່ອນຝຣັ່ງເຮັດທາງຫັ້ນມີແຕ່ໂຕເຫຼືອ ຝຣັ່ງເຂົາວ່າຟານນ້ອຍທີ່ເຂົາເອົາມາກິນຫັ້ນນ່າ,ທາດແທ້ລະມີແຕ່ໂຕເຫຼືອໃຫຍ່ຫັ້ນແລ້ວ ໂຕເຫຼືອນີ້ມັນໃຫຍ່ເກືອບສໍ່າໂຕງົວນີ້ ພົບຢູ່ບ່ອນອາອື່ງຢູ່ນີ້ລະ, ຂອງແຖວນີ້ ພໍ່ແມ່ພວກອາອື່ງມາເຮັດທາງ, ເບິ່ງພວກເພິ່ນເອົາຈົກເອົາຊ້ວານມາຕັກຂຶ້ນແລ້ວບ່ອນໃດດິນສູງ ກໍ່ຂຸດຕັກ ເອົາມາຖົມໃສ່ບ່ອນຕໍ່າໃຫ້ມັນເທົ່າກັນ ເຮັດໃຫ້ດິນມັນຮາບພຽງກັນ ສຸດເຫຼືອທໍລະມານ ແຕ່ຝຣັ່ງຕີເຂົາບັງຄັບ, ຜູ້ທີ່ເຂົາໜີໄດ້ເຂົາກໍ່ໜີ, ຍ້ອນຄຽດພວກຝຣັ່ງເຮັດໃຫ້ຫັ້ນ, ແຕ່ກີ້ເຂົາເອີ້ນວ່າ: ນາຍກາຍຜູ້ຄຸມການເຮັດທາງ. ສ່ວນນາຍກາຍແຖວນີ້ຊື່ວ່າ: ໄກຫວັນ ແຮ່ງຮ້າຍກາດ, ຕອນນີ້ແລ້ວພວກກູລີ ປົບໜີຫຼາຍ, ເວລານັ້ນພວກອາອື່ງກໍ່ໃຫຍ່ແລ້ວ, ອາອື່ງອິດເບິ່ງພວກທວງດນາມທີ່ເປັນທະຫານຝຣັ່ງນີ້

ບໍ່ໄດ້ຄືກັນ, ເບິ່ງພວກມັນບັງຄັບຄົນລາວເຮັດທາງນັ້ນເອົາແທ້ເອົາວ່າ, ອາອຶ່ງຄິດວ່າ: ບ໊ະ! ຄົນລາວກໍ່ມີທະຫານຄືກັນນ່າ. ແຕ່ກໍ່ບໍ່ວ່າຊິບັງຄັບກັນຄືແນວນັ້ນ, ອາອຶ່ງຊິເວົ້າວ່າ ຫວຽດເປັນແນວນັ້ນ ກໍ່ບໍ່ຖືກ, ຫວຽດນາມເໜືອກໍຈຸເຮົານັ້ນລະ, ຜູ້ທີ່ເຂົາຈັບມາຫັ້ນແມ່ນເຂົາຈັບຈຸຫວຽດນາມເໜືອ. ມີແຂວງໜຶ່ງທີ່ເຂົາບໍ່ເຂົ້າກັບຝຣັ່ງຄື: ແຂວງໂທ້ຍອານ ຂອງຫວຽດນັ້ນ ຊຶ່ງແມ່ນແຂວງລຸງໂຮ່ຫັ້ນ. ເຂົາສັບປ່ຽນກັນໄປ ກາຍ 2 ປີ 3 ປີ ຜູ້ໜຶ່ງເຂົາໃຫ້ເຮັດແນວນັ້ນ, ແຕ່ລະເທື່ອປະມານ 100 ກວ່າຄົນພຸ້ນ ຝຣັ່ງບໍ່ໃຫ້ຢູ່ໃກ້ກັນດອກ ເຮັດຄືຄົນໂທດນີ້, ແຕ່ກີ້ອາອຶ່ງໄປສິ່ງຄວາຍນີ້ ເຫັນຝຣັ່ງໃຫ້ຢູ່ຫ່າງກັນ 15 ແມັດ. ອາອຶ່ງໄປສິ່ງຄວາຍເຖິກບັກໃຫຍ່ໂຕໜຶ່ງ, ຝຣັ່ງຊື້ຫັ້ນປະມານ 300, ເງິນອາອຶ່ງນີ້ເປັນຜູ້ສິ່ງຄວາຍໃຫ້ຝຣັ່ງ. ຝຣັ່ງຊື້ໄປຂ້າໃຫ້ໝວດເຮັດທາງນີ້ກິນ, ຂ້າໃຫ້ທັງທະຫານທັງພວກຢູ່ຄຸກກິນແດ່ ທັງຄົນຫວຽດແລະຄົນລາວກິນ. ພວກທີ່ເຂົາເກນໄປເປັນກູລີຫັ້ນຄົນລາວກໍ່ຢູ່ຕ່າງຫາກ ຄົນຫວຽດກໍ່ຢູ່ຕ່າງຫາກ ຝຣັ່ງເອົາໂສ້ໃສ່ໝົດ, ແລ້ວເຂົາກໍ່ໃສ່ກະແຈພ້ອມ ຜູ້ໃດເປັນມວຍເປັນອີ່ຫຍັງແດ່ແລ້ວ ເຂົາກໍ່ມີໄມ້ແປ້ນໜາ ທີ່ເຂົາເຮັດໃສ່, ເຂົາເຈາະເປັນຮູເປັນປ່ອງ ເຊິ່ງເຂົາເອີ້ນວ່າ: ອາແປງ, ຂອງຜູ້ໃດທີ່ເປັນມວຍກໍ່ໄດ້ແຍກອອກຕ່າງຫາກ ເຂົາເຮັດຫັ້ນໜາ ແລ້ວກໍ່ເອົາອາແປງນັ້ນພາດໃສ່ກີບກັບຂໍ່ຕີນ, ຄັນເຈົ້າຕຶງດຸຫຼາຍເຂົາກໍ່ເອົາໂສ້ມາໃສ່ແອວ, ແລ້ວກໍ່ເອົາມາພາດໃສ່ຄໍຫັ້ນຕື່ມ. ໂອລໍາບາກໃດໂສ້ຊໍ່ານີ້ ທີ່ອາອຶ່ງເຫັນເຂົາໃສ່ຫັ້ນ, ຖືວ່າຍີ່ປຸ່ນມາພີ້ແລ້ວ ຈຶ່ງໄດ້ອອກຈາກພວກຝຣັ່ງ. ຍີ່ປຸ່ນເຂົ້າມາຕີຝຣັ່ງ ແມ່ນຖືວ່າປີ 1945 ຍີ່ປຸ່ນເຂົ້າມາຕີຝຣັ່ງໃດ.

ເສິກພວກຟາດສິດຍີ່ປຸ່ນ ໄດ້ບຸກລຸກເຂົ້າມາ ໃນພາກພື້ນອາຊີຕາເວັນອອກໃນປີ 1945, ເຊິ່ງແມ່ນໄລຍະກໍ່ເສິກສົງຄາມໂລກຄັ້ງທີ 2 ແລ້ວ. ພວກຍີ່ປຸ່ນມາຢູ່ລາວໄດ້ 1 ປີ 6 ເດືອນແລ້ວ ເຂົາມາປະຈໍາໝົດນໍາທາງນີ້ ຍີ່ປຸ່ນມາປະຈໍາໝົດ,ຈຸຝຣັ່ງນີ້ກໍ່ແຕກຊະເນືອໝົດ,ເປັນອີກກະທຶກແລ້ວ ບໍ່ຈັກວ່າຜູ້ຊິໄຫ້ຜູ້ຊິຮ້ອງກໍ່ມີ,ແນວຍີ່ປຸ່ນແທງຝຣັ່ງຫັ້ນ ເຂົາເຈາະດັງ,ຝາມື,ເຈາະຫູຝຣັ່ງ,ເຈາະຝາມື ຝຣັ່ງແລ້ວກໍ່ປ່ອຍໃຫ້ໄປໃສກໍ່ໄປແລ້ວ, ຝຣັ່ງຢ້ານຈົນຂຶ້ນພູຂຶ້ນຜາກໍ່ມີ, ໄປ

ເລີຍລະ, ບໍ່ໄດ້ຢູ່ດອກແຖວນີ້, ໃນຄ້າຍໃນປິດຕ່າງໆນີ້ກໍ່ບໍ່ໄດ້ຢູ່ເລີຍດອກ ຄືນ ຄືກັນກໍ່ຢ້ານກັນແທ້ຢ້ານກັນວ່າ ຢ້ານອຳນາດເດ, ຈັກອຳນາດຈັກອິຫຍັງແລ້ວ ບາດນີ້. ອາອຶ່ງເຫັນຄັກແນ່ລະແມ່ນໄດ້ເຫັນຢູ່ໃນບ້ານອາອຶ່ງເອງ ມີຍີ່ປຸ່ນ 11 ຄົນ ແລະ ຝຣັ່ງ 25 ຄົນ, ຝຣັ່ງຍິງຍີ່ປຸ່ນບໍ່ແຕກຕີບໍ່ແຕກ, ແລ້ວຈຳເປັນກໍ່ຕ້ອງ ຍອມ ໃຫ້ແກ່ພວກທະຫານຍີ່ປຸ່ນ. ເບິ່ງທະຫານເຂົາຜູ້ໃດກໍ່ມີປືນຄືກັນ, ຜູ້ເປັນ ນາຍນັ້ນ ມີແຕ່ງ້າວ, ເບິ່ງບາດເຂົາພາຍງ້າວນັ້ນ ໂອ! ເປັນຕາຢ້ານຄືຫຍັງນີ້ ລະ, ງ້າວພັດງ້າວຍີ່ປຸ່ນຕັດເຫຼັກເທົ່າໃດກໍ່ຂາດປຸດໂລດ, ໄດ້ຍິນແຕ່ສຽງມັນ ແກວ່ງໄປມາພັ້ນ ກໍເປັນຕາຢ້ານແລ້ວ ສຽງມັນດັງ ວູ່...ວຸດ. ບາດນີ້ຝຣັ່ງໄດ້ ຍິນເປັນແນວນີ້ ກໍຈຳເປັນແລ້ວ ປະປືນຍອມແລ້ວ! ຍອມແລ້ວ! ເຂົາກໍ່ຫຸ້ມໃສ່ ແລ້ວກໍ່ຈັບ. ເວລານັ້ນມັນມີເຄື່ອງເດເນາະ ຄັນຊິວ່າແລ້ວພັ້ນນ່າ ພໍ້ຍາມໃດກໍ່ຄື ກັນໝົດ ນາຍມັນພາຍງ້າວໄປກ່ອນພວກນີ້, ສ່ວນທະຫານທີ່ໄປຕາມຫຼັງເບິ່ງ ເຂົາເຮັດ ວູ່...ວຸດ ຕອນມັນເຫັນຝຣັ່ງແລ້ວກໍ່ແຮ່ງຄັກ, ເຫັນນາຍມັນກ່ອນໂລດ ລະ ເບິ່ງມັນແກວ່ງງ້າວນັ້ນ ໂອ! ງ້າວອັນນີ້ອາອຶ່ງເຫັນແລ້ວ ຄືມັນເປັນຕາ ຢ້ານແທ້ໃດ.

ບາດນີ້ອາອຶ່ງເວົ້າພື້ນກ່ຽວກັບອາອຶ່ງເອງ ແລະ ອ້າຍນ້ອງຫວຽດນາມ ທີ່ຝຣັ່ງເກນໄປເປັນກູລີເຮັດທາງນັ້ນ ບາດຝຣັ່ງປົບໜີໝົດແລ້ວ ພວກອາອຶ່ງກໍ່ ກະກຽມກຳລັງເຂົ້າໃສ່ ຊ່ວງໄລຍະນີ້ລະ ບໍ່ຊ່ວງປີ 45 ນີ້ແລ້ວ ສວຍໂອກາດ ຂັບໄລ່ພວກຝຣັ່ງຕອນຍີ່ປຸ່ນເຂົ້າມານີ້ລະບໍ. ຕໍ່ມາພວກອາອຶ່ງ ກໍ່ຟາດໂລດ ແລ້ວ. ແຕ່ກີ້ພັ້ນຫວຽດນາມນີ້ ເຂົາເອົາກໍ່ບໍ່ຫຼາຍຄົນ,ເຂົາເລືອກເອົາແຕ່ຄົນສັດຊື່ ເຂົາກໍ່ຈັດຕັ້ງໃຫ້ອາອຶ່ງນີ້ລະເປັນຜູ້ໄປຂຶ້ນຂວາຍສ້າງພື້ນຖານການປະຕິວັດ ມີ ແຕ່ຈຸອາອຶ່ງສອງອ້າຍນ້ອງ ເພິ່ນນີ້ອອກໄປເຄື່ອນໄຫວແຕ່ກີ້.

ຊື່ຜູ້ມາຂຶ້ນຂວາຍປິດລັບ ບໍ່ມີໃຜຮູ້ຈັກ. ຕໍ່ມາກໍ່ໄດ້ມີ ສະຫາຍອຶ່ງຕັບ ກັບສະຫາຍບຸນສິ່ງ, ຕອນນັ້ນພວກເພິ່ນເປັນຜູ້ບັງຄັບບັນຊາກອງຮ້ອຍ ຫຼືກອງ ພັນນີ້ລະ, ຂອງແນວວ່າເຂົາມາບໍ່ຫຼາຍ ກໍ່ເລີຍບໍ່ຮູ້ລືມຫຼຽບ. ພວກນີ້ເຂົາຕັ້ງເອົາ ບໍ່ຫຼາຍ,ແຕ່ວ່າແມ່ນເຂົາເປັນນາຍ ບໍ່ແມ່ນທະຫານທຳມະດາດອກ. ຈຸດປະສົງ

ຂອງການມາຂອງເຂົາເຈົ້າ ກໍ່ເພື່ອຢາກໃຫ້ອາອື່ງໄປເປັນກົດລັບ, ເປັນດັກກົງບໍ່ໃຫ້ໃຜຮູ້. ເວົ້າລວມແລ້ວບໍ່ໃຫ້ປະຊາຊົນຮູ້,ມີແຕ່ອາກູມກັບອາອື່ງນີ້ມີສອງອ້າຍນ້ອງເພິ່ນນີ້. ແລ້ວບາດນີ້ລະ ອາອື່ງເລົ່າເລື່ອງຊີວິດການເປັນຢູ່ຂອງອາອື່ງການກິນການຢູ່ນີ້ມັນທຸກມັນຍາກສິ້ງເສື້ອຊິນຸ່ງ ກໍ່ບໍ່ມີ ມີແຕ່ເສື້ອຊ້ອນທີ່ທະຫານເອົາໃຫ້. ຄາວນັ້ນເຂົາຮ້ອງວ່າທະຫານສະເພາະນຳທາງເຂົາໄປຫັ້ນໄປນີ້ແລ້ວການກິນການຢູ່ຂອງຫວຽດນາມນີ້ກໍ່ກິນນຳພວກອາອື່ງອີກ ບໍ່ມີເຂົາບໍ່ມີນ້ຳ, ໄປຮອດບ້ານໃດ ຕາແສງໃດກໍ່ຄືກັນ, ແຕ່ກີ້ເຂດເມືອງພິນນີ້ມັນຮູ້ຈັກໝົດ ເຂົ້ານ້ຳຫວຽດນາມບໍ່ມີຫຍັງ. ຄາວຕໍ່ສູ້ແຕ່ກີ້ ແຕ່ສະໄໝຝຣັ່ງກິນນຳແຕ່ພວກອາອື່ງແຕ່ກີ້ຫັ້ນອາອື່ງບໍ່ໄດ້ເລືອກ, ເຂົ້າກິນກໍ່ມີແຕ່ເຂົ້າຈ້າວແດງຫັ້ນ. ໝໍ້ກໍ່ໝໍ້ຕົ້ມນ້ຳຕົ້ມຫຍັງທຳມະດານີ້ລະ, ເຮັດຢູ່ເຮັດກິນກໍ່ຢືມເອົານຳປະຊາຊົນ. ພວກອາອື່ງນີ້ເວົ້າເລື່ອງທຸກກໍ່ທຸກແທ້ທຸກວ່າ, ເປັນແບບນີ້ມາຕັ້ງແຕ່ມື້ເລີ່ມເຄື່ອນໄຫວການຕໍ່ສູ້ ຈົນຮອດມື້ໄດ້ປົດປ່ອຍ, ເບິ່ງພວກອາອື່ງ ກະບັ້ງໄມ້ເຮັ້ຍ ອາວໄພນີ້ກັບອາອື່ງກໍ່ໄປນຳກັນ, ໄປແບກກະບັ້ງໄມ້ອັນນັ້ນມີກະປິກັບເຂົ້າຂົ້ວ, ເກືອໃສ່ນຳກັນ[6], ເຄື່ອງປຸງເຊັ່ນ: ແປ້ງນົວ, ນ້ຳປາ, ນ້ຳຕານບໍ່ມີດອກ. ອາອື່ງໄປນຳເຂົາຫັ້ນທຸກອີ່ຫຼີ ມີແຕ່ກິນກະປິ, ຖ້ວຍບ່ວງກໍ່ບໍ່ມີ ບິດົງອີ່ຫຍັງກໍ່ເອົາບັ້ງໄມ້ໄຜ່ນີ້ລະເຮັດຈອກໃສ່ນ້ຳດື່ມກິນ,ເຮັດຖ້ວຍເຮັດບ່ວງຫຼືວ່າການ້ຳ, ຄາວນັ້ນ ໃຜເຮັດແຕກແລ້ວກໍ່ແລ້ວ, ກໍ່ເອົານັ້ນມາໝູນໃຊ້ເຈາະເຮັດຖ້ວຍ ເຮັດບ່ວງໄປຊັ້ນໝາ. ແພຢາງກໍ່ບໍ່ມີຄືກັນ ຄັນອາອື່ງເວົ້າມາແລ້ວນ້ຳຕາເພິ່ນຕົກເວົ້າພົ້ນຄວາມທຸກຫັ້ນຕອນຝົນຕົກແລ້ວກິນເຂົ້າກິນນ້ຳກໍ່ຍາກ, ບໍ່ມີບ່ອນຊົ້ນຝົນ, ຝົນຕົກເອົາມືນີ້ໂຕ່ງນ້ຳກິນ.

ມີເທື່ອໜຶ່ງພວກອາອື່ງໄປຕີຝຣັ່ງຢູ່ພູຕະໂອ້ຍ, ຝຣັ່ງບໍ່ຕາຍຈັກຄົນ, ມີແຕ່ຈັບມັນໄດ້ 4 ຄົນ. ບາດຕີແທ້ໆ ສ່ວນຫຼາຍອາອື່ງບໍ່ໄດ້ຕີ ເຂົາເຈົ້າໃຫ້ອາອື່ງ ເປັນຜູ້ນຳທາງຫຼືເປັນຜູ້ໄປເອົາເຂົ້າເອົານ້ຳ ນຳປະຊາຊົນມາສົ່ງໃຫ້ ເທື່ອ

[6] ແຕ່ກີ້ທະຫານອິດສະຫຼະເອົາກະບັ້ງໄມ້ໃສ່ແຈ່ວ, ເກືອແລະຂອງກິນພາຍໄປ, ນ້ຳກໍເຮັດໃສ່ກະບັ້ງພາຍໄປ, ເອົາຢາພົ້ນເມືອງຢູ່ປ່າຕົ້ມກິນ.

ລະບອກເທື່ອລະບຸງ, ບຸງທັ້ນ ບໍ່ແມ່ນນ້ອຍ ສິ່ງເຂົ້າໃຫ້ອິດສະຫຼະ, ສິ່ງເຂົ້າໃຫ້ທວງດນາມກໍ່ແມ່ນອາອື່ງນີ້ເປັນຜູ້ປະຈຳທັ້ນ. ໃຫ້ແລ້ວບາດນີ້ ມື້ວັນທີ 27 / 6 /1947 ປີໜຶ່ງອີກທີ່ອາອື່ງໄດ້ຢູ່ບ້ານກະດັບນີ້ ພວກເພິ່ນຈັບຝຣັ່ງໄດ້ຢູ່ຫ້ວຍຍ່າລູງນີ້ 3 ຄົນ, ຝຣັ່ງຂາທັກໃຫ້ ພວກອາອື່ງທາມ ອາອື່ງກໍ່ບໍ່ທາມ, ອາອື່ງເວົ້າຊິທາມມັນເຮັດຫຍັງ ເບິ່ງພວກມັນເຮັດໃຫ້ພວກເຮົາເສຍຫາຍຄືຫຍັງນີ້; ແຕ່ວງກທວງດເຂົາທາມ, ທາມພວກຝຣັ່ງທັ້ນ. ເບິ່ງຝຣັ່ງຄົນບັກໃຫຍ່ເບີ້ເລີ້ໃຜຊິທາມຫຼອນ, ໃຫ້ອາອື່ງທາມມັນອາອື່ງບໍ່ທາມ. ທວງດເຂົາເວົ້າວ່າຢາກໄດ້ປະຫວັດຢາກໄດ້ອີ່ຫຍັງຕ່າງໆ ຄັນຂ້າແລ້ວກໍ່ບໍ່ໄດ້ຫຍັງ. ແຕ່ວ່າອາອື່ງບໍ່ຮູ້ຫຍັງພໍແຕ່ເຫັນກໍ່ຢາກຂ້າຝຣັ່ງໂລດ. ອາອື່ງເວົ້າ ກັບທວງດວ່າມັນຂ້າເຮົາ ເຮົາກໍ່ຂ້າມັນກໍ່ແລ້ວກັນຊັ້ນຕິວະ. ອາອື່ງເວົ້າແບບນັ້ນ ແຕ່ທວງດພັດຢາກໄດ້ຄວາມລັບ ເຂົາກໍ່ທາມໄປຊັ້ນລະ. ອາອື່ງເວົ້າວ່າທາມໄປຮອດພຸ້ນພໍແຮງແລ້ວອາຍາເອີຍ.

ຕອນນັ້ນ ຈັບຝຣັ່ງໄດ້ທັງໝົດ 4 ຄົນ. ຫຼັງຈາກເຂົາໄດ້ຝຣັ່ງແລ້ວເຂົາເມືອປະຊຸມ. ບາດຕໍ່ມາອາອື່ງ ກໍ່ໄດ້ເຄື່ອນໄຫວຢ່າງເນື່ອງນິດລຽນຕິດ ເປັນຕົ້ນແມ່ນໃນປີ 1953 ນາຍຂອງເຂົາເຈົ້າຊື່ວ່າ: ອີງທູ ຫຼື ສະຫາຍທູ ໄດ້ມາແຕ່ງຕັ້ງໃຫ້ອາອື່ງ ເປັນກຳມະການກອງຫຼອນທະຫານຕາແສງແລ້ວ, ຕໍ່ຈາກນັ້ນມາເຂົາກໍ່ຮ້ອງອາອື່ງ ໄປປະຊຸມຢູ່ບ້ານຕານາງ ປະຊຸມຢູ່ບ້ານຕານາງທັ້ນ ໄດ້ 15 ມື້. ເມື່ອແລ້ວກອງປະຊຸມ ໃນວັນທີ 26 ເດືອນ 6 ປີ 1953 ແລ້ວ, ຕໍ່ມາພວກອາອື່ງກໍ່ໄດ້ໄປພັກຢູ່ເຮືອນພໍ່ບ້ານທວງດ ພາກັນນັ່ງກິນນ້ຳຮ້ອນ ຫຼັງຈາກກິນນ້ຳຮ້ອນແລ້ວ ຈຶ່ງຈະພາກັນໄປຕໍ່. ເມື່ອເປັນແບບນັ້ນແລ້ວ ພໍ່ບ້ານຝ່າຍລາວວ່າ ຈະຂ້າໝູໂຕໜຶ່ງຕ້ອນຮັບ, ແລ້ວອາອື່ງວ່າບໍ່ທັນດອກເພາະໄດ້ຍິນວ່າສັດຕູຊິມາອ້ອມພວກເຮົາແລ້ວ ເດັກນ້ອຍວ່າເຫັນຄົນມາອ້ອມທັ້ນແລ້ວ ອາອື່ງກໍ່ເຕືອນກັນຢູ່ໃນເຮືອນທັ້ນແລ້ວ. ເດັກນ້ອຍເວົ້າວ່າ ຈັກແມ່ນໃຜມາຢູ່ແຄມບ້ານເຮົານີ້. ແລ້ວອາອື່ງກໍ່ໄປສັງເກດເບິ່ງ ແລ້ວກໍ່ມາບອກອີງທູນີ້ວ່າ: ອ້າຍທູເອີຍດຽວນີ້ມັນບໍ່ແມ່ນຄົນຂ້ອຍ, ດຽວນີ້ແນວໃດກໍ່ຫາທາງໜີ ອັນນີ້ມັນແມ່ນທະຫານມາແຕ່ບ່ອນອື່ນ ມັນບໍ່ແມ່ນທະຫານໄທນາກະຊັງ. ອີງທູລາວເວົ້າວ່າບໍ່ແມ່ນຄົນ

ເຮົາຫວະ ແຕ່ວ່າເຂົາມາອ້ອມແລ້ວ ຖ້າໄດ້ຍິນສຽງປືນເຂົາຕ້ອງຍິງໂລດ ອິງຫູມີປືນແຕ່ອິງຫູບໍ່ຍິງ ຢ້ານມັນຖືກປະຊາຊົນຕາຍໝົດ ເພາະວ່າມີປະຊາຊົນຫຼາຍໃນເຮືອນຫັ້ນ,ຄັນອາອຶ່ງຍິງບາດໜຶ່ງ ສັດຕູຫຸ້ມມາໃສ່ກໍ່ຕາຍໝົດລະເນາະອິງຫູເວົ້າວ່າແໜງສູ້ແລ້ວຕາຍແຕ່ຂ້ອຍຜູ້ດຽວດີກ່ອນ ລາວວ່າຈັ່ງຊັ້ນ ອິງຫູເວົ້າອີກວ່າ ຍິງເຮັດຫຍັງຄົນລາວຄືກັນ. ໃຫ້ຂ້ອຍຂໍຍອມຕາຍຄົນດຽວ. ອາອຶ່ງເວົ້າວ່າ: ເປັນຕາສັນເສີນຍ້ອງຍໍນ້ຳໃຈຂອງລາວ. ຕອນນັ້ນໝາກແຕກກໍ່ມີຫຼາຍຢູ່ແຕ່ວ່າເຂົາບໍ່ຮູ້ຈັກດອກ ເພາະວ່າ ອາອຶ່ງເອົາໄປໃສ່ໄວ້ໃນກະບັ້ງ ຢູ່ໃນໂກນໄມ້ເຂົາບໍ່ຮູ້ດອກວ່າມີຫຍັງຢູ່ຫັ້ນ. ແລ້ວອາອຶ່ງກໍ່ໄດ້ຄືນຢູ່. ພໍດີອາອຶ່ງ ຢູ່ບ້ານຕານາງ ບ່ອນສັດຕູຈັບໝູ່ພວກອາອຶ່ງຫັ້ນມີໝໍໜຶ່ງ ເວົ້າວ່າຍິງແມ່! ຍິງແມ່! ເຂົາວ່າຊິໄປຍິງເຮັດຫຍັງ ຄັນຍິງແມ່ຍິງແມ່ຍ່າ ຢູ່ໃນເຮືອນຫັ້ນ ກໍ່ຕາຍໝົດຊັ້ນ ຄັນຍິງຕາຍໝົດແທ້ຄົນໃນເຮືອນຫັ້ນ. ອິງຫູລາວເວົ້າວ່າ ຄັນຕາຍໃຫ້ຕາຍຜູ້ດຽວລາວບໍ່ໃຫ້ຍິງ, ບໍ່ໃຫ້ຍິງເດັດຂາດ ບໍ່ໃຫ້ປະຊາຊົນຕາຍ, ປານນັ້ນກໍ່ຍັງຕາຍຢູ່ 03 ຄົນ ຕາແສງ 02 ຄົນ ກັບອິງຫູຫັ້ນ. ສຽງປືນກໍ່ດັງເຕິ່ງຕັງເຕິ່ງຕັງມາແລ້ວບາດນີ້ຢູ່ໃນເຮືອນນີ້ກໍ່ສິນລະວິນກັນແລະບາດນີ້, ບໍ່ຈັກແມ່ຍ່າແມ່ຍິງຂ້າມທາງນີ້ໄປທາງນັ້ນ ອາອຶ່ງເວົ້າບອກພວກແມ່ຍິງກໍ່ພາກັນປະສົ້ນປະເສື້ອສັບສົນວຸ້ນວາຍແລ້ວ. ຕອນນັ້ນສຽງປືນເຂົາດອດຍິງ ເຂົ້າບ້ານເລີຍ. ອາອຶ່ງເວົ້ານີ້ ແມ່ນຍັງຢູ່ບ້ານຕານາງ ສັດຕູເວົ້າວ່າ ລົງມາແມ່! ລົງມາແມ່! ຢູ່ໃນເຮືອນມີຈັກຄົນ. ສັດຕູຮ້ອງໃສ່ຫວຽດ ອິງຫູຢູ່ນີ້ບໍ່! ສັດຕູຮ້ອງຊື່ຫວຽດນາມ. ສັດຕູວ່າເຈົ້າ ອິງຫູແລ້ວ. ອິງຫູກໍ່ມີປືນກະບອກໜຶ່ງປືນລັກແລ. ສັດຕູເວົ້າວ່າ ລົງມາແມ່ ຄັນເຈົ້າບໍ່ຢາກຕາຍ! ແລ້ວອິງຫູກໍ່ລົງ, ພວກສັດຕູມາຖ້າຢູ່ກ້ອງຂັ້ນໄດຫັ້ນແລ້ວ. ສັດຕູບອກໃຫ້ອິງຫູນອນຂວ້ຳລົງ, ແລ້ວເຂົາກໍ່ຢຽບຄໍອິງຫູ, ຜູ້ທີ່ຢຽບກໍ່ແມ່ນຄົນລາວເຮົານີ້ລະ, ມັນໄປເປັນທະຫານສັດຕູ, ແຕ່ກີ້ເຂົາຢູ່ບ້ານຕາແສງຮ້ອຍຕໍ່ຫັ້ນ ບໍ່ຈື່ຊື່. ຕໍ່ມາກໍ່ແມ່ນພວກອາອຶ່ງແລ້ວບາດນີ້, ຢູ່ນຳກັນມີຕາແສງສອງຄົນ: ມີຕາແສງກະລຸບ ແລະຕາແສງຂອງຝ່າຍເຮົານີ້ລະເຂົາໃຫ້ລາວລົງກ່ອນ ແລ້ວເຂົາກໍ່ຍິງໃສ່ໜ້າຜາກຂອງລາວຫັ້ນ ລົງກັບທີ່ເລີຍ,

ຜູ້ທີ່ຍິງຊື່ວ່າສະຫວ່າງ ຢູ່ບ້ານຕາແຫຼກ ເປັນຕາແສງບ້ານກະລຸບຄົນບຣູນີ້ແລ້ວ, ແລ້ວກໍ່ແມ່ນທີ່ຂອງຕາແສງພິນ. ແຕ່ກີ້ຢູ່ບ້ານສະແຫຼວນີ້ ຊື່ຂອງລາວ ແມ່ນ ຊື່ພໍ່ຕາຍໍ. ຕາແສງຂອງຝ່າຍເຮົານີ້ຖືກຍິງຢູ່ຊານ, ແລ້ວລາວກໍ່ລົ້ມລົງຢູ່ຊານ ຫັ້ນ. ຕອນນັ້ນສະຫວ່າງຊິລົງໄປ (ເປັນທະຫານສັດຕູ) ຄົນອິດສະຫຼະບອກສັດ ຕູວ່າ: ຊ້ຳແມ່! ຊ້ຳແມ່! ລາວຢາກໃຫ້ຍິງຊ້ຳ ແຕ່ແລ້ວທວງດທີ່ມານຳຫຼັງສັດຕູ ບໍ່ທັນໄດ້ຍິງຊ້ຳ ຜູ້ຖືປືນຍ່າງມາຫັ້ນ. ມັນເວົ້າວ່າ: ນີ້ແມ່ນອິງທູບໍ! ຄັນອິງທູ ເອົາໄວ້ເຮັດຫຍັງ ຂ້າຖິ້ມສາ! ມີຜູ້ໜຶ່ງພັດວ່າ: ຢ່າຂ້າ! ຢ່າຂ້າ!, ໝໍໜຶ່ງອີກ ພັດເວົ້າວ່າ: ເຈົ້າວ່າຢ່າຂ້າ ຂ້ອຍນີ້ຊິຂ້າແລ້ວ ມັນກໍ່ຍິງປືນກະເດັນໃສ່ບາດດຽວ ອິງທູຫັ້ນໝົດເລີຍ[7]. ເມື່ອເປັນແນວນັ້ນ ພວກອາອື່ງຫຼາຍຄົນ ຢູ່ນຳຄະນະຕາ ແສງຫັ້ນເກາະ ພ້ອມພາກັນລົງມາຫວັງວ່າຊິມາຫ້າມບໍ່ໃຫ້ຂ້າບໍ່ໃຫ້ຕີກັນພວກ ເຮົາຄົນລາວຄືກັນ ແຕ່ພໍເມື່ອລົງມາ ພວກສັດຕູກໍ່ຫຸ້ມພິກໃສ່ໂລດ, ຕອນນັ້ນ ເຂົາກໍ່ຈັບພະນັກງານພວກອາອື່ງຫຼາຍຄົນເຕີບເຊັ່ນ: 1. ແມ່ນສະຫາຍ ອາສະ ລາງຄົນບ້ານພິນນີ້ເອງ, 2. ແມ່ນໝໍແຖວ ຢູ່ບ້ານວັງເວີນ, 3.ໝໍວຽງ ຢູ່ບ້ານ ພະຍູດຕວງ ເຊິ່ງປັດຈຸບັນເອີ້ນວ່າ ບ້ານຕູງ, 4 ໝໍແບ່ງ ໄທບ້ານກະດັບ, 5. ແມ່ພໍ່ຕາໂນ ຢູ່ບ້ານຕານາງ ຕອນນັ້ນ ເຂົາຈັບກັນອີກກະທຶກ ອາອື່ງນີ້ກໍ່ ສວຍໂອກາດ ຕອນເຂົາກຳລັງສີນລະວົນກັນນັ້ນ ປົບລົງໄປຮອດບ່ອນນາຍເຂົາ ຢູ່ບ້ານຫ້ວຍຕອນ ເຊິ່ງໃນເວລານັ້ນແມ່ນພໍ່ມາເລີຍຫັ້ນເປັນອາສາດັງ ເຊິ່ງເປັນ ຄົນຊົນຊາດດຽວກັນກັບອາອື່ງ, ລາວເປັນນາຍລາວເປັນຕາແສງຫ້ວຍຕອນ ຢູ່ຫັ້ນ. ໄປຮອດພຸ້ນ ອາອື່ງກໍ່ໄດ້ອະທິບາຍລາຍລະອຽດ ແລະ ປຶກສາຫາ ວິທີທາງເພື່ອຈະປົກປ້ອງເອົາກັນໄວ້ ເພາະວ່າໄທເຮົາມັນກໍ່ແມ່ນຄົນທາງບ້ານ ດຽວກັນ ພໍ່ມາເລີຍ ກໍ່ເຕັມໃຈຊ່ວຍ. ສ່ວນຄົນທີ່ເປັນໝູ່ອາອື່ງ ພວກສັດຕູ ຍິງຕາຍຫັ້ນ ສັດຕູເອົາໄມ້ທັບໄວ້ແລ້ວ, ເຂົາກໍ່ປາດເອົາຫູນີ້ແມ່ນຫູລາວ, ອັນນີ້

[7] ສັດຕູຂ້າພະນັກງານ ອິດສະຫຼະ ຢູ່ບ້ານຕານາງຫັ້ນ ມີຕາແສງຄົນລາວ ສອງຄົນເປັນເຜົ່າບຣູ ເຄື່ອນໄຫວນຳອິດສະຫຼະ, ອີກຜູ້ໜຶ່ງແມ່ນທະນາຄານຫວຽດມິນ ຊື່ວ່າອິງທູ ທີ່ພວມປະຊຸມກັນຢູ່ບ້ານຕານາງ

ແມ່ນຫູທອງດ ມັນເອົາຫູເມືອລາຍງານນາຍມັນຢູ່ພຸ້ນ. ມັນເອົາຫູຫັ້ນ ໄປແຈ້ງໃຫ້ຈັ່ງຊີ້ແລ້ວ ລູກຫຼານເອີຍ ຄັນເລົ່າເລື່ອງທຸກແລ້ວ. ບາດນີ້ເຂົາຈັບເອົາໝວດນັ້ນມາໃຫ້ຝຣັ່ງ, ແລ້ວເຂົາເວົ້າກັບຝຣັ່ງວ່າ: ຈຸທີ່ຈັບມາໄດ້ນີ້ ແມ່ນໄປກັບທອງດມີນ, ແຕ່ຈຸທີ່ຖືກຈັບນີ້ພັດວ່າພວກຂ້ອຍນີ້ແລ້ວ ມາລາຍງານໃຫ້ເຂົາໄປຂ້າອີງຫູ, ແຕ່ວ່າໝວດທີ່ຈັບພວກອາອື່ງມານີ້ເຂົາບໍ່ຮູ້ດອກ. ກະພໍດີເຂົ້າເປົ້າຍາຕາແສງຫ້ວຍຕອນ, ກໍ່ເລີຍຢຳຕື່ມວ່າ: ແມ່ນແນວນັ້ນແທ້ແລ້ວ, ຝຣັ່ງບໍ່ເຊື່ອຈຸເຂົາທີ່ຈັບພວກອາອື່ງມາຫັ້ນ, ຝຣັ່ງມາເຊື່ອທາງອາອື່ງພີ້. ພ້ອມນັ້ນຝຣັ່ງຍັງໄດ້ໃຫ້ເງິນທາງເຮົາພີ້ຜູ້ໜຶ່ງ 150 ເງິນແຕ່ກີ້ແລ້ວ ຝຣັ່ງເວົ້າວ່າ ດີແລ້ວພວກໂຕນີ້, ຈຸນີ້ບໍ່ດີ ເພາະວ່າຊຸມເຈົ້າມາລາຍງານແທ້ໆ ກໍ່ຍັງວ່າຊຸມເຈົ້າໄປກັບທອງດມີນອີກ ໃຫ້ປ່ອຍເຂົາເຈົ້າໄປຊະ ຈຸເຂົາກໍ່ມີປັນຍາຄືກັນ[8]. 150 ເງິນລາວເຮົານີ້ລະ ເງິນເຈ້ຍນີ້ມັນແມ່ນຂອງລັດຖະບານ, ມັນມີຮູບເຈົ້າຊີວິດນັ່ງແບບນີ້ຫັ້ນນ່າ, ມີຊ້າງສາມຫົວ ຂອງບ່ອນເຈົ້າຊີວິດນັ່ງຫັ້ນມີແຕ່ຮູບນາກ ໝົດວ່າຄວາຍໂຕໜຶ່ງລາຄາ 300ກີບ ເງິນສາມຊາດ ອິນດູຈີນນີ້ລະ. ຕໍ່ມາຄວາມບາບຂອງພວກມັນທີ່ເຄີຍສ້າງໄວ້ ກໍ່ນຳມາຕອບສະໜອງ ພວກມັນຢ່າງສາສົມນັ້ນກໍ່ຄື: ພວກເຮົາໄດ້ປົດປ່ອຍທົ່ວປະເທດ ແລະພວກເຮົາໄດ້ຂັບໄລ່ຝຣັ່ງແລ້ວປົດປ່ອຍຊຳເໜືອ, ດຽນບຽນຟູ, ປົດປ່ອຍທົ່ວປະເທດໃນປີ 1954. ເວົ້າເລື່ອງອີງຫູຕາຍກໍ່ອີດູຕົນລາວຢູ່, ລາວຕາຍ ປີ1953, ປີ1954 ໝູ່ພັດປົດປ່ອຍແລະ ການຕໍ່ສູ້ກໍ່ໄດ້ສິ້ນສຸດລົງໃນປີນັ້ນເອງ. ລັດຖະບານເຮົາເອີ້ນວ່າ: ຂໍຖອນຄືນ. ຄັນເວົ້າລວມແລ້ວຊື່ແມ່ນກອງຫຼອນກໍ່ຢ່າ ແມ່ນຫຍັງກໍ່ຢ່າ ຜູ້ເຮັດການປະຕິວັດຂອງລັດຖະບານ ໃຫ້ໄປຢູ່ຊຳເໜືອພຸ້ນໝົດ ເຂົາເອີ້ນວ່າເປັນທະຫານສອງແຂວງໝົດ, ພວກອາອື່ງ 7 ຄົນ ກໍ່ໄປຄືກັນ, ໄປຮອດເພິ່ນກໍ່ຖາມວ່າ: ນີ້ແມ່ນຕາແສງເຮັດແຕ່ກີ້ແມ່ນບໍ, ເພາະວ່າໜັງສື ຍັງຢູ່ນຳຕາແສງເກົ່າຫັ້ນ

---

[8] ປີ 1954 ປະກາດຢຸດການສູ້ຮົບ, ທະຫານຝຣັ່ງ ແລະ ທະຫານອິດສະຫຼະ ຢູ່ນຳກັນບໍ່ຍິງກັນອີກ ແລະ ໄດ້ຈັດຕັ້ງ ລັດຖະບານປະສົມ ປອງດອງຊາດ ໄດ້ຂຶ້ນເຕົ້າໂຮມ 2 ແຂວງຝ່າຍທະຫານອິດສະຫຼະ, ແຕ່ຝ່າຍວຽງຈັນ ບໍ່ປະຕິບັດຕາມສັນຍາ.

ໝົດ. ຈາກນັ້ນຈຸອາອື່ງກັບໄປ ກໍ່ຖືກຢູ່ເມືອງໃໝ່ພຸ້ນ ຢູ່ທ່າໂຂ່ງພຸ້ນ. ແຕ່ກີ້ເພິ່ນເອີ້ນວ່າເມືອງໃໝ່ ມີອາອື່ງ,ກະແບ່ງ,ສະລາງ, ອາກູມ,ທ້າວແຖວ, ຕວງບໍ່ໄດ້ໄປມີແຕ່ 7 ຄົນ ກັບອາກູມ ແລ້ວບາດນີ້ອາອື່ງໄປຮອດຕາແສງ ເພິ່ນກໍ່ເຮັດໜັງສືໄປຫາເມືອງ ແຕ່ກີ້ອາອື່ງບໍ່ມີໃບໜັງສື.

ຕາແສງນີ້ພັດແມ່ນຕາແສງພິນແຕ່ກີ້ຫັ້ນ, ຕາແສງລະມາເອີ້ນເອົາ, ເພາະວ່າເພິ່ນເຮັດໜັງສືມາຫາຕາແສງ ເພິ່ນຢາກເຕົ້າໂຮມທະຫານກອງຫຼອນໃຫ້ເປັນທະຫານສອງແຂວງ ແລ້ວທະຫານກໍ່ເຮັດໃບນໍາສົ່ງ, ແລ້ວໃຫ້ໄປຍື່ນກັບເຈົ້າເມືອງແລ້ວບາດນີ້,ເພື່ອນໍາເອົາໃຫ້ເຈົ້າເມືອງແລ້ວ ແຕ່ອາອື່ງລະບໍ່ຮູ້ຈັກວ່າໃຫ້ໄປຫາກະໂລແນນພຸ້ນເດີ ເຂົາບອກແນວນັ້ນເວົ້າສໍານຽງຊໍາເໜືອ, ແຕ່ກີ້ເພິ່ນກໍ່ຍັງມີກະໂລແນນຢູ່.

ເປັນນັກສືບອີຫຍັງເຈົ້າເມືອງນັ້ນ,ຂອງວ່າຍັງບໍ່ທັນປົດປ່ອຍ, ແລ້ວເຈົ້າເມືອງນັ້ນເປັນຜູ້ທີ່ຢູ່ເມືອງຫັ້ນ ຊື່ວ່າເຈົ້າເມືອງກອງລ້ອນ, ລາວຍັງເປັນຕາແສງຝຣັ່ງຢູ່ຍັງບໍ່ທັນຍຶດອໍານາດ, ຂອງມັນຍັງບໍ່ທັນໄດ້ປົດປ່ອຍ. ລາວເຫັນຊື່ຂອງຊຸມອາອື່ງນີ້ແລ້ວ ລາວລະເຮັດໜັງສືມາເອີ້ນ ຊຸມອາອື່ງນີ້ແລ້ວ ລາວກໍ່ເຮັດໜັງສືໃຫ້ໄປຫາເຈົ້າເມືອງ ແລ້ວເຈົ້າເມືອງໃຫ້ໄປຍື່ນໃຫ້ກະໂລແນນສົມສັກ ຢູ່ທ່າໂຂ່ງ. ກະໂລແນນສົມສັກພັດຍື່ນໜັງສືໃຫ້ໄປຢູ່ຄຸກພຸ້ນ. ຮອດເມືອງໃໝ່ພຸ້ນເອີ້ໄປພຸ້ນເດີ, ຂ້ອຍຊິໄປສົ່ງເຈົ້າ. ເຂົາຢູ່ເມືອງໃໝ່ນີ້ລະຢູ່ເມືອງເຊໂປນຢູ່ (ພາກເຊໂປນ)ເບື້ອງນັ້ນເຂົາຮ້ອງວ່າເມືອງໃໝ່, ຟາກຂວາເບື້ອງນີ້ ເຂົາຮ້ອງວ່າເມືອງເກົ່າ. ບາດນີ້ຈຶ່ງຮູ້ວ່າຈຸເພິ່ນ 7ຄົນ ຖືກຈັບທາງອ້ອມໝົດ.ເສັດເລີຍ ກໍ່ຍ້ອນທະຫານລາວເຮົານີ້ລະ. ເທດຜິນສັດຕູຈັບຫັ້ນແນວເຂົາເອີ້ນອາອື່ງວ່າ: "ນີ້ເຈົ້າມັກອິດສະຫຼະ ແມ່ນບໍ? ເຈົ້າຈຶ່ງໄປເຂົ້າຢູ່ພຸ້ນ. ເຈົ້າມັກຢູ່ພູຢູ່ຜາບໍ, ເພາະເຈົ້ານີ້ມັກອິດສະຫຼະຄັນເຂົາເອີ້ນເຈົ້າຫັ້ນໄວທີ່ສຸດ". ເຂົາເວົ້າແນວນັ້ນ ແລ້ວເຂົາກໍ່ເອົາໃສ່ຄຸກ. ຕອນນັ້ນຝຣັ່ງເມືອໝົດແລ້ວຍັງແຕ່ລາວເຮັດ ລາວສານ 03 ເດືອນ ອາອື່ງຢູ່ໃນນັ້ນກໍ່ບໍ່ເຫິງແລ້ວ ບາດນີ້ຕາແສງລະໄອ ເອີ້ນພໍ່ແມ່ຂອງພວກອາອື່ງຫັ້ນໄປແລ້ວ ເວົ້າວ່າຄັນເຈົ້າຢາກຄືນໃຫ້ເອົາເງິນໄປໄຖ່ເອົາ. ອາອື່ງ

ນີ້ຮັບປະກັນ (ຕາແສງເວົ້າແນວນັ້ນ) ໄປໄຖ່ເອົາຜູ້ໜຶ່ງ 06 ຮາງ, ອາອຶ່ງສອງອ້າຍນ້ອງເພິ່ນຂາຍຄວາຍໄປໄຖ່ຈຶ່ງໄດ້ອອກ ເພາະແຕ່ກີ້ມັນບໍ່ເງິນມີຄໍາ[9].

ແຕ່ກີ້ ແຕ່ເຊັ່ນພໍ່ເຊັ່ນແມ່ເພິ່ນຫັ້ນ ເຂົາກໍ່ໄປຂາຍຄວາຍມາໄຖ່ເອົາ, ຂອງຕາແສງໃຫ້ໄປໄຖ່ແລ້ວ ຕາແສງກໍ່ໄດ້ເງິນແນ່, ຄັນມັນຊິຂ້າກໍ່ໄດ້ຫັ້ນແລ້ວ, ຖ້າມັນບໍ່ຂ້າ ແລ້ວມັນກໍ່ເອົາເງິນຊິວ່າແນວນັ້ນ.

ຕາແສງແຕ່ກີ້ຫັ້ນຊື່ວ່າ: ອາຊວງ ຕາແສງສັດຕູຫັ້ນຄືນບຮູໝົດ. ສັດຕູຕາຍໝົດແລ້ວ ດຽວນີ້ບໍ່ຍັງຈັກຄົນແລ້ວ ບາດມາແຕ່ພຸ້ນແລ້ວ ອາອຶ່ງກໍ່ຢູ່ເຂົາບໍ່ໃຫ້ໄປໃສ, ຈຸຕາແສງຈຸເມືອງນີ້ ເຂົາຈັບຕາມອງແລ້ວ. ບາດນີ້ເຂົາຈໍາກັດແລ້ວ. ບາດນີ້ອາອຶ່ງບໍ່ໄດ້ໄປໃສອີກແລ້ວ, ເພິ່ນມີແຕ່ຢູ່ເຮັດໄຮ່ເຮັດສວນຊື່ໆ, ຊິອອກໄປໃສກໍ່ມີຄົນພື້ນເມືອງເຂົາໝົດ ຄັນອອກໄປໃສ ເຂົາກໍ່ມາຖາມໂລດ ເຂົາເວົ້າວ່າ ຢ້ານນີ້ອາອຶ່ງໄປພົວພັນກັບອິດສະຫຼະ ຫຼືກັບຫວຽດ ມິນຫັ້ນໝວດອາອຶ່ງຄາແລ້ວ, ຈຸອາອຶ່ງເຮັດນໍາກັນກໍ່ຫຼາຍຄົນກໍ່ຄາຄືກັນ, ຢາກໄປໃສກໍ່ບໍ່ໄດ້ ເຂົາໄປຈອບເບິ່ງລຽນຕິດ. ແລ້ວບາດນີ້ອາອຶ່ງ ໄປຫວຽດນາມ ໄປຂາຍໝູເອົາມາແຕ່ບ້ານ ອາອຶ່ງນີ້ແລ້ວໄປ. ແລ້ວເຂົາຈະຈັບລຸງອາອຶ່ງຫັ້ນ ເພື່ອເປັນຕົວປະກັນ, ເຂົາກໍ່ມັດເອົາຄາຫັ້ນໂລດ.

ເຂົາກໍ່ຈັບຫັ້ນແລ້ວ, ຂອງເຂົາຢາກຈໍາກັດ ອາອຶ່ງບໍ່ໃຫ້ໄປໃສ ແລ້ວບາດນີ້, ລຸງອາອຶ່ງເວົ້າວ່າ ຄັນເຈົ້າຢາກໄດ້ຖວ້າຍ ຢາກໄດ້ໝໍ້ໃຫ້ເຈົ້າເອົາໝູມາໃຫ້ລຸງ.

(ລຸງຂອງອາອຶ່ງຊື່ວ່າ: ອາມາດ). ລາວຊິໄປຂາຍໝູໃຫ້ແລ້ວ, ລາວຊິຊື້ມາໃຫ້ອາອຶ່ງ. ອາອຶ່ງເອົາໃຫ້ລາວໄປຂາຍແລ້ວລາວກໍ່ຖືກຈັບ ແລ້ວເຂົາກໍ່ຂັງໄວ້ ຢູ່ເຮືອນຕາແສງ ຕາແສງມາບອກວ່າ ໃຫ້ໄປໄຖ່ເອົາ, ຄ່າໄຖ່ຫັ້ນໃຫ້ເປັນເງິນຮາງ 02 ຮາງ ແລະ ເຫຼົ້າໄຫທັງໄກ່ທັງໝູ ຄັນໝູສໍ່າ 10 ກິໂລ ເຂົາບໍ່ເອົາ ໝູຮອດ 30 ກິໂລເຂົາຈຶ່ງເອົາ, ເອົາໄປໄຖ່ແລ້ວເຂົາຈຶ່ງປ່ອຍ, ເຂົາຈັບເອົາເງິນບໍ່ແມ່ນເຂົາຈັບເອົາຄົນ.

---

[9] ໄປໄຖ່ແປວ່າເອົາເງິນໄປຈ້າງເຈົ້ານາຍໃຫ້ເອົາອອກຈາກຄຸກ.

ຕົກມາໃນປີ 1957 ພວກອາເມລິກາເຂົ້າມາ, ພວກມັນເອົາເທັບມາໂຄສະນານຳ ແຕ່ລະບ້ານແຕ່ລະເມືອງໃຫ້ປະຊາຊົນຟັງ. ມັນໂຄສະນາວ່າຊຸມເຈົ້າຢ່າໄປນຳອິດສະຫຼະເດີ ຄັນຜູ້ໃດຫາກໄປນຳອິດສະຫຼະ, ເລືອດລູກເລືອດຫຼານຊຸມເຈົ້າຫັ້ນ ຊິຄືກັບເລືອດແບ້ເລືອດງົວ. ມັນຊົນບອງເລືອດ, ມັນແຕ້ມຮູບຄົນເຮົານີ້ຂຶ້ນຢູ່ເຄືອໄມ້ຫັ້ນ, ແລ້ວມັນແຕ້ມເສືອອ້າປາກໃສ່ຢູ່ທາງ ລຸ່ມ, ສ່ວນເຊືອກຢູ່ທາງເທິງພຸ້ນມັນແຕ້ມໜູກຳລັງກັດເຊືອກຢູ່ ໃຫ້ເຮົາຕົກໃສ່ເສືອຄັນເຈົ້າໄປນຳອິດສະຫຼະ, ຄັນເຈົ້າຢາກເຫັນໃຫ້ເບິ່ງເອົາ. ໂອ໊ຍມັນເຮັດຄັກ ຊຸມຜູ້ຍ່າຜູ້ຍິງບໍ່ເຄີຍເຫັນເຂົາວ່າຕາຍໝົດແລ້ວ ເບິ່ງເລືອດມັນແຕ້ມຫັ້ນມັນໝາຍວ່ານີ້ແມ່ນເລືອດລູກລືອດຫຼານຂອງພວກເຈົ້າ ຄັນຊິໄປຕໍ່ສູ້ກັບພວກມັນ ຄັນໃຜຫາກໄປນຳອິດສະຫຼະຕ້ອງເປັນແບບນີ້ ເບິ່ງມັນເຮັດບອງເລືອດຄວາມມັນມາໂຄສະນາຫັ້ນ. ທຸກໆບ້ານມັນເຮັດແນວນັ້ນໝົດ, ຄັນຜູ້ໃດໄປລີ້ງມັນ ຫຼື ພາມັນໄປ ມັນໃຫ້ມື້ໜຶ່ງ 50 ກີບ (50 ກີບແຕ່ກີ້), ແຕ່ຕ້ອງໄດ້ເປ້ໄດ້ເຈ່ຍເຄື່ອງໃຫ້ມັນເຄື່ອງຈັກມັນ, ໄປແລ້ວມັນກໍເອີ້ນພໍ່ບ້ານ ເອີ້ນປະຊາຊົນມາຟັງ ມັນກໍ່ໄປໂຄສະນາທຸກບ້ານຫັ້ນແລ້ວ. ຄົນລາວເຮົານີ້ ພາໄປອາເມລິກາ ມັນກໍ່ສັ່ງໃຫ້ຄົນລາວເຮົານີ້ເອົາໄປ, ຄົນມັນຫັ້ນກໍ່ໄປນຳຊື່ໆ ມັນຊິຖືຫຍັງ, ມີແຕ່ຄົນລາວເຮົານີ້ໄປເປ້ເຄື່ອງໃຫ້ພວກມັນ. ສ່ວນຫຼາຍກໍ່ແມ່ນອາເມລິການັ້ນລະ ພວກມັນກໍ່ພາກັນຢູ່ທ່າໂຂງນີ້ ມີທັງຜູ້ຍິງຜູ້ຊາຍຢູ່ທ່າໂຂງນີ້ ຫຼານນີ້ກໍ່ບໍ່ຮູ້ຈັກລະບໍ ແມ່ນໃຜເດຊິບໍ່ຮູ້ ແຖວນີ້ເຂົາເອີ້ນວ່າ: ເຢຊູຫັ້ນໜາ. ເອີ ເວລາພວກມັນ ໄປບ້ານນັ້ນບ້ານນີ້ ບໍ່ມີທາງລົດມັນກໍ່ຍ່າງໄປ ຂອງແນວວ່າມັນຢາກໄດ້ໄຊຊະນະຫັ້ນເດ, ຂຶ້ນພູຂຶ້ນຜາມັນກໍໄປ. ປີໃດໄທເຮົາປ່ອນບັດຫັ້ນ ຄືຊິແມ່ນປີ 58 ນີ້ເບາະອັນເງິນຝຣັ່ງແຕ່ກີ້ຫັ້ນ ເຂົາເອີ້ນວ່າ ເງິນກີບຄືກັນ ກໍ່ມີທະນາຄານຄືກັນ ເຂົາວ່າເງິນທະນາຄານ ຖ້າຜູ້ໃດປອມແປງເຂົາວ່າມີໂທດ ເຂົາວ່າແນວນັ້ນ. ເງິນແຕ່ກີ້ຫັ້ນອາອີ່ງກໍ່ເອົາໄວ້ໝົດ ໃບຮອກໃບກີບ ໃບຫ້າກີບ ອາອີ່ງມີເກັບໄວ້ເພື່ອໃຫ້ລຸ້ນລູກລຸ້ນຫຼານ ຮູ້ວ່າເງິນນີ້ແຕ່ຄາວນັ້ນໃຊ້ໃນຕອນນັ້ນ ອັນນີ້ລຸ້ນນີ້ ໃນປັດຈຸບັນເງິນດັ່ງກ່າວ ອາອີ່ງຍັງມີຢູ່ເຮືອນນັ້ນລະແນວລະໃບແນວລະໃບອາອີ່ງ

ຮັກສາໄວ້. ໃນໄລຍະເຂົາປ່ອນບັດຫັ້ນເກາະ, ຈຸພວກອາອື່ງພັດຖືກຢູ່ສະຫວັນນີ້, ຝ່າຍເຮົາມີລຸງມອກ ລາວຖືກເລືອກຜູ້ແທນປີ 58. ຢູ່ທາງສະຫວັນມີສອງຄົນ ມີລຸງມອກແລະທ່ານໝໍສິນ ສ່ວນຢູ່ເມືອງເຊໂປນເຮົານີ້ ແມ່ນອາຍາເຜີຍຄົນຊົນຊາດພວກຊົນຊາດບຣູ, ລາວເລືອກຜູ້ແທນທາງເຮົາແຕ່ກີ້ແລ້ວ. ບາດນີ້ທາງຝ່າຍພວກເຂົາມີຍາອຸ່ນກັບຍາຫຳ ຢູ່ເມືອງເຊໂປນນີ້ ພັກພວກສັດຕູມີຍາອຸ່ນກັບຍາຫຳ ທາງສັດຕູຫັ້ນມີສອງຄົນເທົ່ານັ້ນ, ນີ້ເປັນຜູ້ແທນທາງອາອື່ງນີ້ສາມຄົນນີ້, ໃນນີ້ຄົນແນວລາວມີແຕ່ອາຍາເຜີຍຜູ້ດຽວຢູ່ເມືອງນີ້. ຍາເຜີຍນີ້ບໍ່ໄດ້ເພາະລາວເປັນກຳມະການບັນຊາຢູ່. ລຸງມອກນີ້ນຳເບີໜຶ່ງໃດຄົນອາອື່ງໃດລຸງມອກ, ອາຍາເຜີຍ, ເອີທ່ານໝໍສິນພອນ. ບໍ່ແມ່ນລຸງສີຊະນະ, ສີຊະນະ ສີສານ ບໍ່ແມ່ນຄົນຝ່າຍເຮົານີ້ລະ, ໄດ້ແລ້ວບາດນີ້ເຂົາປ່ອນ 13 ເທື່ອຈຶ່ງວ່າແລ້ວ. ແຕ່ກີ້ອາອື່ງໄປປ່ອນຢູ່ບ້ານເຈົ້າ 2 ເທື່ອ ໄປປ່ອນແລ້ວ ກໍ່ບໍ່ຖືກ ໄປປ່ອນຢູ່ເມືອງພິນອີກ 2 ເທື່ອ ໄປປ່ອນຢູ່ເມືອງເຊໂປນ 3 ເທື່ອ ອາອື່ງຖືກໄປປ່ອນລຽນຕິດ 13 ເທື່ອ ກໍ່ຍັງບໍ່ຖືກ, ຈາກນີ້ກໍ່ໄປປ່ອນຢູ່ເຮືອນໂງແນນ, ໄປປ່ອນຢູ່ວັດກໍ່ບໍ່ຖືກ, ສຸດທ້າຍກໍ່ໄປປ່ອນຢູ່ເຮືອນໂງແນນອີກ ບ່ອນນີ້ລະມັນຊິເກີດເສິກຢູ່ໃນຜາມປ່ອນບັດ ຢູ່ເຮືອນໂງແນນຫັ້ນ ມັນມີຟານແລ່ນເຂົ້າມາ ຕຳຫຼວດຊິມາຍິງມັນແລ້ວມັນແລ່ນປົບເຂົ້າປ່າແຄມບ້ານ. ໂງແນນສິມສັກ ກໍ່ຍັງຢູ່ຫັ້ນແລ້ວ ມື້ອື່ນພັດຊິຮັບປ່ອນບັດໃໝ່ອີກແລ້ວ ຝົນລະຕົກບໍ່ຈັກລົມຈັກຫຍັງ. ບາດນີ້ມັນພັດເປີດເຮືອນໂງແນນສັງກະສີເປີດຂຶ້ນໝົດ, ຝາເຮືອນເບື້ອງໜຶ່ງມັນພັດອອກຕົກໄປປະມານສິບປາຍແມັດພຸ້ນ ລົມເປັນເຫດຈັກມັນພັດເອົາອີຫຍັງລະ, ໄຄແດ່ແຕ່ປ່ອນບັດແລ້ວຈຶ່ງເກີດເຫດ, ບາດນີ້ນັ້ນແມ່ນປ່ອນເທື່ອທີໜຶ່ງ. ເທື່ອທີສອງ ພັດໄປປ່ອນຢູ່ຫ້ວຍສານ, ແລ້ວທາງກອງຮັບຜິດ ຊອບອິດສະຫຼະນີ້ຊື່ວ່າຊະລີ ຊຶ່ງແມ່ນຄົນຊົນຊັ້ນກຽວກັບອາອື່ງນີ້ແລ້ວ, ມີອາອື່ງສອງຄົນກັບອ້າຍບຸນຍົງ ຢູ່ກອງພັນທີ 14 ໄປນັ່ງເບື້ອງເຂົາຊຽນຫັ້ນແລ້ວ, ເບິ່ງເຂົາຊຽນໃບບັດໂຕນີ້ໂຕນັ້ນ ເປັນຜູ້ສັງເກດການ. ພວກອາອື່ງເຂົາບໍ່ໃຫ້ບາຍ ພາຍຫຼັງຈາກຂຽນຮຽບຮ້ອຍແລ້ວ ເຂົາກໍ່ບໍ່ໃຫ້ເຂົ້າທາງນີ້ແລ້ວ ໃຫ້ອອກທາງນັ້ນ

ໂດຍໃຫ້ປ່ອນລົງໃສ່ຫີບທີ່ໝາຍໄວ້ແລ້ວນັ້ນ, ອັນນີ້ແມ່ນຫີບຢາເຜີຍ, ອັນນີ້ແມ່ນຫີບຢາຫາ້, ອັນນີ້ແມ່ນຫີບຢາອຸ່ນ. ບາດທະຫານທາງເຂົາລີ້ຊອນຢູ່ໃນເຮືອນ ເຂົາບໍ່ໃຫ້ພວກອາອື່ງຮູ້ແລ້ວ ບັດນີ້ຖ້າຄືນເຮົາຖືບັດທັ້ນໄປ ເຂົາບໍ່ໃຫ້ໃສ່ຫີບໂຕນັ້ນ ເພາະແມ່ນຫີບຂອງພວກອາອື່ງທັ້ນ ເຂົາບອກວ່າ: ຢ່າໃສ່! ຢ່າໃສ່! ເອົາໃສ່ຫີບໂຕນີ້, ເຂົາກໍ່ດຶງແຂນກັນໄປມາຢ່າງສັບສົນວຸ້ນວາຍ. ໂອ ຍ້ອນແນວນີ້ເດນັ້ນຈຶ່ງບໍ່ແລ້ວເປັນຈັກເທື່ອ ເບິ່ງຄວາມຂີ້ຫຼັກຂອງເຂົານັ້ນ ເມື່ອຮູ້ວ່າເປັນແນວນັ້ນ ອາອື່ງກໍ່ໄປລາຍງານ ບຸນຍົງກໍ່ຈົດໝາຍໄວ້. ບາດຈົດໝາຍໄວ້ແລ້ວ ເອົາມາເວົ້າກັນຄືນ, ແລ້ວເຂົາກໍ່ດຶງກັນອຶກກະທຶກຄຶກໂຄມ. ບາດໄປປ່ອນຢູ່ຫ້ວຍສານກໍ່ເປັນເຫດຄືກັນ, ເບິ່ງຢູ່ເຮືອນຍານາງມາ ຍານາງແມ່ ທັ້ນເປີດສາດໃສ່ກັນຈົນໝົດ, ເຮືອນທະຫານນີ້ເປີດໄປໝົດ. ໄປປ່ອນເທື່ອນີ້ຄັກ, ເບິ່ງຢູ່ແຄມເຊ ຢູ່ຟາກພຸ້ນມີແຕ່ພວກອາອື່ງໝົດ, ຢູ່ຕາແສງຕາບອງນີ້ມີແຕ່ຊື່ກາຍນັ້ນປະຊາຊົນເຂົາບໍ່ໃຫ້ໄປ ມີແຕ່ຕາແສງຜູ້ດຽວມາ. ບາດນີ້ມີແຕ່ມີອິດສະຫຼະໝົດ ຂອງເອົາລົງມາແຕ່ເມືອງອື່ນພຸ້ນ, ເຂົາເອົາມາໃສ່ພໍດີ ສອງກອງຮ້ອຍ, ຍານາງມາກັບຍານາງເລີດ, ເຂົາກໍ່ຢູ່ແຄມນໍ້າຄືກັນ ພວກອາອື່ງ ກໍ່ຢູ່ທາງພຸ້ນ ອາອື່ງກໍ່ກັດແຂ້ວຢູ່ ມຶງມາເວລາໃດມຶງຕາຍ ເວລານັ້ນໂລດນີ້ແລ້ວ. ໃນຕອນເຊົ້າມື້ອື່ນຕໍ່ມາເຂົາກໍ່ເມືອສິ່ງ. ປີ 1961 ເຂົາຊິເຮັດມໍລະກົດຢູ່ຂີວທ່າໂຂງທັ້ນ, ທາງນີ້ແດ່ ທາງພຸ້ນແດ່ແລ້ວ ອາອື່ງກໍ່ໄປເຮັດຄືກັນ, ເຂົາຮ້ອງຖືກຊື່ອາອື່ງແລ້ວ ອາອື່ງໄປເຮັດ, ໄມ້ທັ້ນບໍ່ແມ່ນໄມ້ນ້ອຍ ໄມ້ສໍາກັບກະຟຸຍເຂົາຕັດແຕ່ພຸ້ນ, ຕັດມາແຕ່ແຖວນາໂລພຸ້ນ ເຂົາຕັດເອົາແຕ່ໄມ້ຈິກໄມ້ຮັງ ເຂົາເອົາມາເຮັດມໍລະກົດ, ເຂົາກໍ່ານົດອາທິດໜຶ່ງໃຫ້ແລ້ວ. ບາດນີ້ເຫັນທາງເຮົາຂ້າມມາທາງເຊພຸ້ນ, ບ່ອນທັ້ນມີ 11 ຄົນແລ້ວ ທາງເຊໂປນທັ້ນ 9 ຄົນ. ເມື່ອເຂົາເຫັນແລ້ວເຂົາກໍ່ລາຍງານໂງແນນ, ແລ້ວເຂົາໄປສ່ອງເບິ່ງ, ເຂົາເອົາກ້ອງສ່ອງໄປສ່ອງຄັກແນ່ ແຕ່ກີ້ທັ້ນ ກົມມະດາ[10] ຊົນຊາດພວກອາອື່ງ ຢູ່ບ້ານຕາແສງ

[10] ກົມມະດານີ້ແມ່ນເຜົ່າບຣູ ຢູ່ຕາແສງເສິກ - ເຊໂປນ, ບໍ່ແມ່ນກົມມະດາເຜົ່າລະເວນຢູ່ປາກຊ່ອງ ຈໍາປາສັກດອກ.

ເສິກລາວໄດ້ພົບຕີ ອາອື່ງທັ້ນເຫັນເຂົາສ່ອງແລ້ວ ອາອື່ງໄປຖາມເບິ່ງວ່າສ່ອງຫຍັງອາຍາ, ແລ້ວລາວເວົ້າວ່າຜີ, ອາອື່ງເວົ້າວ່າຜີຫຍັງ ລາວເວົ້າວ່າ ສ່ອງແນວໜຶ່ງທັ້ນເຫັນຜີ, ສ່ອງແນວໜຶ່ງເຫັນເປັນດອກເລົາ. ເຂົາເວົ້າທັ້ນອາອື່ງບໍ່ໄດ້ປາກແລ້ວບາດນີ້. ຮອດຕອນແລງມາເຂົາລວມກັນແລ້ວ. ຈຸກູລີແຕ່ກ່ອນເຂົາຮ້ອງວ່າກູລີ, ເຂົາບໍ່ໃຫ້ນອນຢູ່ຄ້າຍເຂົາໃຫ້ໄປນອນຢູ່ວັດ, ໄປນອນແລ້ວ ກໍ່ໃຫ້ໜຶ້ງເຂົ້າໜຶ້ງນ້ຳ ເຮັດຢູ່ເຮັດກິນລະແດ່ເດີ ເຂົາວ່າມີຄົນຮອດ 500 ຄົນພຸ້ນ. ຢູ່ວັດທັ້ນ ກໍ່ຂ້ອນຂ້າງໃຫຍ່ ມີຄົນຫຼາຍ ທັງຍາຄູໄປນອນຢູ່ທັ້ນ ຍັງບໍ່ແອອັດກັນໃດ່ຢູ່ວັດທັ້ນ, ໄປນອນຢູ່ທັ້ນລະ ໂຖແນນວ່າໃຫ້ເຂົາເຮັດ 7 ມື້ແລ້ວສົ່ງເຂົາເມືອສາ. ສ່ວນຈຸໄປເອົາເກືອຢູ່ກະແຊັ້ນທັ້ນ ທະຫານທາງເຂົາພົບທາງເຮົານີ້ 20 ຄົນ ເຂົາກໍ່ບໍ່ໄດ້ເຮັດຫຍັງດອກ, ເຂົາກໍ່ປ່ອຍໃຫ້ເມືອ ເຂົາວ່າຊຸມເຈົ້າເອົາເມືອໄປ່, ເຂົາໄປສົ່ງພວກເຮົາ, ຈຸນີ້ຢ້ານ, ຈຸໂຊເຜີທັ້ນເຂົາບໍ່ກ້າ ເພາະອາອື່ງເວົ້າວ່າ ກ່ອນວ່າຊິເອົາໄປສົ່ງໃຫ້ອິດສະຫຼະ, ກໍ່ຈຸເກົ່າທັ້ນແລ້ວໄປສົ່ງ, ໄປສົ່ງກໍ່ທັງສັ່ນທັງເຊັນແລ້ວ, ຈັກວ່າຊິເປັນແນວໃດ ແລ້ວກໍ່ເວົ້າວ່າ ກະພຶງກະພຶກໄປຊື່ໆ ຄັນເຂົາຊິລັດຕີລັດຂ້າ ກໍ່ໃຫ້ວ່າໄປສົ່ງກູລີ ເຊິ່ງຕອນໄປສົ່ງນັ້ນກໍ່ແມ່ນຍາມເດືອນ 6 ເດືອນ 7 ນີ້ລະ. ສົ່ງກູລີເມືອແລ້ວ ກໍ່ສົ່ງພວກອາອື່ງເມືອບ້ານ, ເຂົາມາເຮັດມໍລະກົດທັ້ນກໍ່ບໍ່ແລ້ວຊ້ຳ ເຂົາຢ້ານຜີທັ້ນ, ແລ້ວເຂົາກໍ່ເອົາກູລີໄປນອນຢູ່ວັດທັ້ນ ແລະ ກໍ່ບໍ່ມີຄວາມສາມາດເຮັດຕໍ່ໄປໄດ້ອີກ ເພາະວ່າ ຢ້ານຜີຢູ່ທັ້ນ, ແລ້ວກໍ່ສົ່ງກູລີເມືອ ພວກມາເຮັດທາງ ແລະພວກກຳມະກອນໄດ້ເມືອໝົດຍ້ອນຜີທັ້ນ ທີ່ແທ້ຊິແມ່ນຜີຫຍັງ ພວກອິດສະຫຼະໄປຫຼອກ ຢູ່ປ່າເຫຼົ່ານັ້ນທັ້ນແລ້ວວ່າຜີ. ແຜນຂອງພວກເຂົາໄປຫຼອກກໍ່ເພື່ອວ່າ ບໍ່ໃຫ້ພວກເຂົາເຮັດມໍລະກົດຢູ່ນີ້ ຢູ່ບ່ອນຂີວທ່າໂຊ່ງດຽວນີ້ທັ້ນ. ຍ້ອນທະຫານຂອງພວກເຂົາທັ້ນຢ້ານພວກເຮົາ, ເຂົາກໍ່ເລີຍຕັດຂີວທັ້ນເສຍ. ອັນນັ້ນອາອື່ງກໍ່ຍັງເກັບເປັນຄວາມລັບຢູ່, ຈົນມາຮອດເທົ່າທຸກວັນນີ້.

ຕໍ່ມາໃນວັນທີ 16 ນັ້ນ ພວກທະຫານທຸ່ນໄຊງ່ອນ ຍົກທັບມາຍິງແລ້ວບາດນີ້. ມັນຍິງໄປທົ່ວທິບ, ມັນເລີ່ມຍິງແຕ່ວັນທີ 16 ເດືອນ 02 ທຳອິດ

ມັນເອົາຍິນມາຍິງກ່ອນ ມັນຈູດພູຈູດຜາກ່ອນ. ກຳລັງຂອງພວກອາອື່ງກໍ່ໄດ້ກະກຽມແລ້ວ, ທາງອາອື່ງກຽມໄປເອົາປະຊາຊົນ ຕອນນັ້ນສັບສົນ, ຈັດແຈງພະນັກງານໄປເອົາປະຊາຊົນກໍ່ບໍ່ທັນຊ້ຳໃດ. ວັນທີ 17 ເດືອນ 02 ແລ້ວມັນລົງມາແລ້ວບາດນີ້ ເວລາ 06 ໂມງ ຕອນເຊົ້າຂອງວັນທີ 17 ຍິນມາສຳກັບຝູງແມງເມົ່ານີ້ລະ, ບໍ່ຈັກມັນຍ່ອນລົດຖັງ ລົດດຸດ ລົດຊາ ລົງໝົດຄາວດຽວ. ມັນເຮັດສຳແມງເມົ່າບໍ່ຈັກຍິນນ້ອຍ ບໍ່ຈັກຍິນໃຫຍ່, ຈຸອາອື່ງນີ້ຕົກສະເຫງີ ແລ້ວບາດນີ້ ຈຸນີ້ໄດ້ຖ້ຳຢູ່ພູນີ້ ຈຸນັ້ນໄດ້ຢູ່ຖ້ຳພູໜ່ອຍນັ້ນ ສ່ວນພວກເພິ່ນນີ້ ຍັງບໍ່ທັນມີຖ້ຳ, ອາໄສແຕ່ຂຸມທີ່ຂຸດເອົາເອງຫັ້ນ ຫາວິທີແລ້ວບາດນີ້ ຊິເຮັດແນວໃດປະຊາຊົນ ກໍ່ຍັງບໍ່ຮູ້ວ່າອັນໃດເປັນອັນໃດ.

ມັນລົງມາແລ້ວຕອນອາອື່ງໄປເອົາປະຊາຊົນຫັ້ນ ແຕ່ມັນຍັງບໍ່ທັນໄດ້ຫວ່ານລະເບີດລົງ, ມີແຕ່ເອົາທະຫານຂອງພວກມັນລົງພູນີ້, ພູກະບອກ, ພູກະຍໍ ມີແຕ່ຍິນໝົດ, ແລ້ວລົດເກາະລົດຖັງ ເຂົາກໍ່ເອົາມາລົງໄວ້ຫັ້ນໝົດ ພວກມັນຫວັງຢາກຕີຟ້າແມບ ຕອນນັ້ນພວກອາອື່ງກໍ່ຍັງຢູ່ໃນຫັ້ນແລ້ວ, ພວກອາອື່ງກຳລັງຕັ້ງເຮືອນ, ຫວຽດໄລດ໌, ຫວຽດໄລດ໌ໄດ້ຍິນເຂົາເວົ້າຄວາມຫວຽດນຳກັນພວກອາອື່ງກໍ່ໄດ້ເວົ້າວ່າ: ເມື່ອໄດ້ແລ້ວ ຈຸນີ້, ທັງແມ່ຍ່າແມ່ຍິງ ໄດ້ປຸກລະດົມກັນເມືອແລ້ວ, ພວກເຂົາຮູ້ ຖາມເຂົາວ່າ ໂຕເມືອເຮັດຫຍັງ? ລາວເວົ້າວ່າ ມັນເປັນໜ້າທີ່ຂອງລາວ [11] ຫວຽດທາງພວກເຮົານີ້ແລ້ວ ທາງແມ່ຍ່າແມ່ຍິງ ອາອື່ງຖາມວ່າ ເປັນຫຍັງຈຶ່ງເມືອ ເຂົາວ່າມັນແມ່ນໜ້າທີ່ພວກເຮົາ. ແຕ່ວ່າເຂົາຮູ້ໝົດແລ້ວ, ເຂົາລົງມາແລ້ວກໍ່ເມືອເລີຍ. ເຂົາບໍ່ແມ່ນທະຫານເວົ້າລວມແລ້ວຫັ້ນນາ ເຂົາແມ່ນກຳມະກອນ, ເຂົາກໍ່ກັບເມືອເຮືອນເຂົາ ເພາະເຂົາມາເຮັດວຽກຢູ່ຫັ້ນຊື່ໆ, ຈຸທະຫານຫັ້ນໄປບອກເຂົາ ຢູ່ບ່ອນເຂົາຕັ້ງແຄ້ມ.

ບ່ອນເຂົາຕັ້ງແຄ້ມຫັ້ນຫຼາຍເທື່ອວ່າ ພວກນີ້ຖ້າຫາກວ່າຍັງດື້ຢູ່ນີ້ຕາຍຕອນນັ້ນບໍ່ຄິດວ່າຊິຍັງເປັນຄົນ, ຂອງແນວວ່າຍັງເປັນອັນວຸ່ນໆຢູ່ໃດ. ບາດນີ້ບໍ່ມີຈັກຄົນແລ້ວຢູ່ຫັ້ນ. ເຂົາກໍ່ຍ້າຍເຂົ້າມາຄ້າງຢູ່ໃນເມືອງເຊໂປນ, ພວກອາອື່ງນີ້

---

11 ຫວຽດທາງພວກເຮົາໄປເພາະມັນແມ່ນໜ້າທີ່ຂອງພວກເຮົາ

ມີ 05 ຕາແສງ, ແມ່ນວ່າຖືກການຄວບຄຸມຂອງທະຫານໄຊງ່ອນໝົດ, ເຂົ້າບໍ່ໄດ້ ອອກບໍ່ໄດ້ແລ້ວບາດນີ້, ຈັກຊິໄປໃສ ແນວມັນປິດລ້ອມແກ້ງກິກ ຢູ່ໃນວົງປິດລ້ອມ, ຈຸດ 2 ຈາກພິນ, ຈຸດ 3 ບ້ານດົງ ບ້ານດົງແຕ່ກີ້ກໍເປັນຕາແສງຄືກັນ, ຈຸດ 4 ແກ້ງຫຼວງ, ຈຸດ 5 ກະລຸບ ຕາແສງກະລຸບ, ຈຸດ 6 ເຊໂປນ ເຊໂປນເໜືອທັງໝົດ ມີ 6 ຕາແສງ ຖືກຢູ່ໃນວົງປິດລ້ອມຂອງທະຫານຫຸ່ນໄຊງ່ອນ ຊິໄປໃສກໍບໍ່ໄດ້. ຊິອອກໄປໃສກໍບໍ່ໄດ້ ເວົ້າລວມແລ້ວຢູ່ແນວນັ້ນລະ, ມີແຕ່ຂຸດຂຸມຢູ່ໃນຫັ້ນ. ອາອຶ່ງເຮັດກິນເຮັດຫຍັງກໍ່ເຊື່ອງຄ້ອນໄຟ ແສງໄຟ ຢ້ານມັນເຫັນ ຢ້ານຍົນມາເຫັນ ກໍຈໍາເປັນເຮັດແນວນັ້ນແລ້ວ ແຕ່ວ່າຢູ່ໃນຫັ້ນບໍ່ຮອດເດືອນ ຂຸມສໍາຮອງ ກໍ່ໄດ້ເຮັດໄດ້ຢູ່ໄປຈັ່ງຊັ້ນແລະ. 10 ມື້ 20 ມື້ກໍ່ຍ້າຍໄປພຸ້ນອີກ, ຂຸດຂຸມລຽນຕິດ, ຂຸດຂຸມສໍາຮອງລຽນຕິດອີກ, ໄປຢູ່ໃສຂຸດຂຸມຢູ່ຫັ້ນແນວນັ້ນ ໂອ! ປະຊາຊົນຢູ່ໃນວົງປິດລ້ອມ ຕ້ອງໄດ້ເຄື່ອນຍ້າຍຕະຫຼອດ, ຢູ່ນີ້ 05 ມື້ ຢູ່ຫັ້ນ 10 ມື້, ຢູ່ໃສກໍຂຸດຂຸມ ແລ້ວຍ້າຍລຽນຕິດ ຄັນບໍ່ຍ້າຍກໍຊິເຮັດແນວໃດ. ຕໍ່ມາຈຸອາອຶ່ງກໍ່ໄປກັບພວກຫວຽດເພື່ອກຽມກໍາລັງ, ສ່ວນປະຊາຊົນຊິເຮັດແນວໃດ ຕັ້ງຢູ່ໃນວົງສະກັດ. ບາດແລ້ວນີ້ມີແຕ່ທະຫານທ້ອງຖິ່ນ, ຂອງທະຫານຫຼວງທາງພຸ້ນບໍ່ເຫັນສົ່ງມາຊ່ວຍ, ມີແຕ່ທະຫານທ້ອງຖິ່ນກອງຫຼອນພວກອາອຶ່ງກອງຫຼອນ 80 ຄົນ. ຕໍ່ມາພວກເພິ່ນຈຶ່ງສົ່ງທະຫານຫຼວງ 80ຄົນມາສົມທົບກັບທະຫານທ້ອງຖິ່ນ 80 ຄົນ ຖືວ່າມີ 160 ຄົນ. ບາດນີ້ຄໍາແພງຈັກຊິໄປໃສແລ້ວ ເພາະວ່າກໍ່ເປັນຫົວໜ້າ, ສ່ວນອາອຶ່ງໄດ້ຮັບຜິດຊອບທະຫານທ້ອງຖິ່ນກັບກອງຫຼອນ. ອາອຶ່ງແບ່ງປັນຈຸຫັ້ນ ຫວຽດນາມເວົ້າແນວນີ້ຢູ່ພູຢູ່ຜາທະຫານໄຊງ່ອນມັນລົງກໍຢ່າມັນ, ບໍ່ໃຫ້ມັນລົງແຕ່ເມືອງເຊໂປນ ແລະ ເມືອງພິນ, ຄັນບ່ອນໃດພວກມັນປັກທຸງແລ້ວ ແມ່ນພວກເຮົາຕີບໍ່ໄດ້. ເພາະສັນຍາກັບເຂົາແນວນັ້ນແລ້ວເດ, ສັນຍາລະຫວ່າງລັດຖະບານທາງເຮົາກັບທາງເຂົາຫວຽດຮ່າໂນ້ຍ ແລະທະຫານພວກອາອຶ່ງ 80 ຄົນ ຫັ້ນມອບໃຫ້ຫວຽດນາມພາໄປເຝົ້າເມືອງພິນ ກັບເມືອງເຊໂປນ, ໃຫ້ໄປເຝົ້າກັບຫວຽດນາມ, ໃຫ້ໄປເຝົ້າກັບຫວຽດນາມເຝົ້າໄວ້ຢ້ານຫຸ່ນໄຊງ່ອນລົງມາ. ພວກຫວຽດກໍຕ່າງຫາກ, ຄົນ

ອາອື່ງ 80 ຄົນ ນັ້ນຢູ່ນຳຫວຽດແລະໄປເຝົ້າຢູ່ເມືອງເຊໂປນ ແລະ ເມືອງພິນ. ທະຫານອາອື່ງແດ່ ແລະທະຫານແດ່ໄປນຳກັນນັ້ນ. ແລ້ວອາອື່ງກໍໄປທາງນີ້ ໄປກັບຜູ້ກອງເທົ່າງບໍ່ໄດ້ປະກັນໄປກັບອາອື່ງນີ້ ແມ່ນຕາງໜ້າໃນກອງບັນຊາການຄຳປານນີ້, ບໍ່ໄປລວມກອງປະຊຸມນຳພັນເອກຄຳປານຫັ້ນ. ບາດນີ້ຈື່ແລ້ວຕີ່, ບໍ່ປະແລ້ວ, ເຂົາຍັງບໍ່ທັນສັ່ງຕີ ຫວຽຍັງບໍ່ທັນສັ່ງໃຫ້ຕີ, ມີແຕ່ເຝົ້າເອົາຊື່ໆ. ແຕ່ກີ້ຫັ້ນລາວໃສ່ໝວກຫວຽດ ໝວກແບແລຫັ້ນໜາ, ລາວເອົາເສື້ອແຂນສັ້ນ ພາດໃສ່ແນວນີ້ລະ, ປືນສັ້ນກໍມາພາດແນວນີ້. ອາອື່ງເວົ້າວ່າແນວນີ້! ອາຍາ ຄຳປານເອີຍ! ມັນບໍ່ແມ່ນອາເມລິກາເຊີນເຈົ້າມາເອົາບຸນ, ອາກາຫັ້ນອາອື່ງກໍ່ຮູ້ຈັກແລ້ວມັນບໍ່ແມ່ນປືນສັ້ນ ເຈົ້າຄືຊິຮູ້ຈັກແລ້ວ ເຈົ້າເປັນກອງບັນຊາການ ມັນບໍ່ແມ່ນວ່າມັນເຊີນເຈົ້າໄປເອົາບຸນນຳມັນ ອາເມລິກາຫັ້ນ, ຄັນໝົດລູກປືນຫັ້ນແລ້ວ ເຈົ້າຕາຍ ອາອື່ງເວົ້າແນວນັ້ນ. ແຕ່ກີ້ປືນບໍ່ອຶດ ຊິເອົາຢູ່ໃສກໍ່ໄດ້ປືນອາກາ, ຄັນເລື່ອງປືນສັ້ນນັ້ນເອົາຢູ່ໃສກໍ່ໄດ້, ອາອື່ງກໍ່ມີ 2 ກະບອກຄືກັນ; ໄປກັບອາອື່ງ ກັບບັກເທົ່າງບໍ່ໄດ້ປະກັນ, ໄປພູຍີ. ການປົດປ່ອຍທຳອິດແມ່ນຕ້ອງເຂົ້າໄປເອົາເຄື່ອງ, ອ້າຍອາອື່ງ ອາກຸນຫັ້ນໄປກັບຫວຽດ ໄປເອົາເຄື່ອງກິນຢູ່ໃນຫັ້ນມີເຂົ້າສານຫວຽດຫັ້ນ ສ່ວນປືນກໍ່ບໍ່ໃຫ້ຖືຫຼາຍ ເພາະນະໂຍບາຍເຂົາໃຫ້ 40 ຄົນ ຕໍ່ 08 ກະບອກ. ບາດໄປຮອດແລ້ວ ເຫັນສັດຕູມັນລົງມາ ແຕ່ພຸ້ນເຂົາຈູດໝົດສາງຂອງພວກເຮົາ, ໃນນັ້ນສາງເຂົ້າ, ສາງສິ້ງເສື້ອຈັກແມ່ນຫຍັງເຂົາຈູດໝົດ. ຝ່າຍຂວານັ້ນແລ້ວ ຈູດລົງມາແຕ່ພູຍີຫັ້ນ, ເພາະວ່າເຂົາລົງມາທາງພູຢູ່ທາງສາງອາອື່ງຫັ້ນ ເຂົາເຫັນແລ້ວເຂົາກໍ່ຈູດໝົດເລີຍ. ທັງສາງອາວຸດ, ສາງເຂົ້າສານ. ແຕ່ອາວຸດບໍ່ມີດອກ, ເພາະວ່າພວກເຮົາເຊື່ອງໄວ້ຢູ່ບ່ອນອື່ນແລ້ວ ມີແຕ່ສາງເຂົ້າຢູ່ໃນຫັ້ນມີປ່ອງສິ້ນກັບສິ້ງເສື້ອ. ປືນຫັ້ນ ໂອ! ບໍ່ໃຫ້ມັນຮູ້ຈັກດອກ. ບາດນີ້ຕີກັນແຕ່ 06 ໂມງເຊົ້າ ຮອດ 03 ໂມງແລງສະຫາຍພະໄລ ມາແຕ່ພຸ້ນມາລາຍງານອາອື່ງວ່າ ຫວຽດມາລາຍງານທາງເຮົາຕາຍ 07 ຄົນ ຫວຽດທາງເຮົານີ້ລະ ຫວຽດໂຮ່ຈິມິນ ຫັ້ນຊິເອົາຫຍັງໄປສູ້ເຂົາຂອງວ່າປືນມີແຕ່ 8 ກະບອກ ຕໍ່ 80 ຄົນ, ຂອງວ່ານາຍເຂົາບໍ່ໃຫ້ຖືປືນ, ບາດ

ແລ້ວພວກເຮົາໄປລາຍງານກອງພັນ ກ່ຽວກັບເລື່ອງທີ່ເກີດຂຶ້ນນັ້ນ ເພິ່ນຈຶ່ງອະນຸຍາດໃຫ້ແຕ່ລະຄົນມີປືນຄົບມື.

ບາດໄດ້ອາວຸດຄົບແລ້ວ ພວກອາອຶ່ງກໍພາກັນໄປຕີພວກມັນເລີຍ ບໍ່ໄດ້ສົນນຳສັນຍອກສັນຍາຫຍັງເລີຍ, ຄຽດແຮງເດ ມັນກໍຍັງບໍ່ຮັກສາສັດຈະຄືກັນ. ບໍ່ໄດ້ວິນເນີ ວັນທີນັ້ນ ແຕ່ວ່າໃນໄລຍະເດືອນ 05 ນີ້ ລະຂອງວ່າໄດ້ 43 ວັນ ມັນວ່າຢູ່ນີ້. ສ່ວນຈຸປືນ 8 ກະບອກນັ້ນ ກໍບອກເນືອ, ສອງສາມມື້ ຕໍ່ມາກໍ່ຟາດກັນອີກ ໂອ! ທັງຄືນທັງປືນນີ້ແລ້ວຕັກກັນບາດນີ້, ຢ່າເວົ້າເລີຍແຕ່ 06 ໂມງເຊົ້າ ເຖິງ 03 ໂມງແລງຈຶ່ງເຊົາ. ຍິນກໍໄດ້ຍິງ ຈັກບໍ່ໄດ້ຍິງ ຂອງແນວວ່າຢູ່ນຳກັນກັບພວກເຂົາຫັ້ນ [12] , ພວກອາອຶ່ງກໍ່ຢູ່ນຳກັນກັບພວກເຂົາຢູ່ເທິງພູຫັ້ນ ເຂົາລົງແຕ່ພຸ້ນຕາມທາງນີ້ລະ ທາງອາອຶ່ງຍຶດໄດ້ແລ້ວບາດນີ້ ຂອງວ່າເຂົາກັບ ອາອຶ່ງພັດຢູ່ປະຈຳຫັ້ນ ມັນກໍຢ້ານຄືກັນຕື່ ບາດນີ້, ເອີບໍ່ຢ້ານແນວໃດເນາະມັນລົງມາ ອາອຶ່ງຫາກໍ່ຕອກໂລດລະ. ບັ້ນຮົບນີ້ພວກອາອຶ່ງໄດ້ໄຊຊະນະ ເຊິ່ງຈັບມັນໄດ້ 20 ຄົນ. ພວກທີ່ຖືກຈັບນັ້ນກໍ່ມັດທຳມະດາຫັ້ນແລ້ວ. ຫວຽດ ນາມເໜືອເຂົາມັດເອົາຂໍ້ມືເອົາຊື່ໆ ເຂົາບໍ່ໄດ້ມັດສອກມັດແສກຫຍັງ [13] ,ອາອຶ່ງພັດກັດແຂ້ວກັດຄາງຄັນອາອຶ່ງຈູງນີ້ຈັ່ງເບິ່ງແຕ່ເຂົາບໍ່ໃຫ້ອາອຶ່ງຈູງ, ເຂົາຈູງເອົາເອງ. ບໍ່ເວົ້າແຕ່ທະຫານໃຫຍ່, ເດັກນ້ອຍມັນກໍ່ຍັງໃຫ້ຈູງຄືນຄຸມຄັກແນ່ມັນຈຶ່ງໃຫ້ຈູງ. ບາດນີ້ພັດຍັງພວກອ້າຍລຽງທີ່ເຮັດກິນໃຫ້ພວກເຂົາປະຈຳຫັ້ນເຂົາວ່າ ສັດຕູຈັກລອດມາແຕ່ໃສອີກ 06 ຄົນ ພໍດີຈຸອ້າຍລຽງໄປລ້າງເຂົ້າ, ສັດຕູກໍ່ມາຍິງປືນ M 16 ດັງຕູາດໆ ສັດຕູມາຫຼອນຍິງທາງເຮົາ. ບາດນີ້ຫວຽດມາຖາມວ່າຈັ່ງໃດ, ມັນຢູ່ທາງໃດ? ຊະເລີຍເສີກກໍ່ຢູ່ຫັ້ນ ບາດນີ້ຄັນເຈົ້າໄປໃສເບິ່ງກໍຢ້ານ ຄັນຂ້ອຍໄປເບິ່ງກໍຢ້ານ ເພາະວ່າບໍ່ຮູ້ບ່ອນມັນຢູ່ເບິ່ງ ຈັກມັນຈະມາທາງໃດ, ອາອຶ່ງໄປໝົດ

---

12 ລຸງອາອຶ່ງແລະທະຫານຂອງເພິ່ນເວລານີ້ ຢູ່ໃກ້ກັນກັບທະຫານສັດຕູ, ຢູ່ເທິງພູແລະຍິງກັນ

13 ເມື່ອທະຫານຫວຽດນາມເໜືອຈັບທະຫານຫຸ່ນໄຊງ່ອນໄດ້ແລ້ວເຂົາບໍ່ໄດ້ມັດສອກເຂົາມັດຂໍ້ມື,ຄົນຫວຽດເອງຜູ້ຈູງ.

ກໍ່ເຫັນແລ້ວ. ບາດນີ້ຄົນອາອື່ງຕາຍພຸບຢູ່ແລ້ວ, ເຫັນແລ້ວກໍມາລາຍງານກອງພັນທວຽດຈຸທາງຕີນພູຍີ ກໍ່ມີ 2-3 ກອງຮ້ອຍ[14], ແລ້ວໄປລາຍງານວ່າ: ພີ້ເດີມັນຢູ່ທາງກາງນີ້ ແລະ ຄົນພວກເຮົາຕາຍແລ້ວ. ວ່າແຕ່ຮູ້ບ່ອນຈຸດມັນຢູ່ແລ້ວໄປບຸດດຽວ ກັບມາແລ້ວກໍ່ຈັບໄດ້ 06 ຄົນ. ໄປຈັບມາທັງເປັນບໍ່ໄດ້ຂ້າດອກ. ມັນໄປຍິງຈຸເຮັດກິນຢູ່ຫັ້ນ, ຕໍ່ມາຈັບມັນໄດ້ແລ້ວ. ພວກເພິ່ນກໍໄປເອົາຢູ່ສາງບ້ານຕະນາງ ແລະລາວກໍ່ໄປກັບທວຽດອີກ. ຕອນໄປເອົາເຄື່ອງຢູ່ສາງເຂົ້ານີ້ພວກສັດຕູເຫັນຂອງວ່າທາງສັດຕູມັນແປນເດ, ມັນຍິງປືນໃຫຍ່ສາມລູກ ມາຕົກໃສ່ທວຽດ ອາອື່ງໂຕນລົງຂຸມ, ລູກປືນບໍ່ແຕກ ທວຽດເວົ້າວ່າ ໂອຍ! ຍັງເປັນຄົນຍ້ອນເຈົ້ານໍ[15], ເຂົາໄປເອົາເຄື່ອງກໍໄດ້ມາ. ຕອນນັ້ນເຂົາມາເວົ້າວ່າ ອາອື່ງເຈົ້າມີຫຍັງ, ອາອື່ງວ່າບໍ່ມີຫຍັງດອກ ວ່າມີແຕ່ໂຕຂ້ອຍນີ້ລະ. ຂອງວ່າບຸນວາດສະໜາ ອາອື່ງບໍ່ໄດ້ເຮັດຫຍັງກັບສັດຕູ ອັນນີ້ແລ້ວ ອ້າຍເມງມາສຳພາດ ອາອື່ງກໍ່ເວົ້າວ່າ ຂ້ອຍຮຽນຢູ່ບັນຊາການຫັ້ນ, ເພິ່ນກໍ່ເອົາຊ້ວານຂຸດຂຸມ ຕາມທີ່ໄດ້ຮຽນມານັ້ນ,ແມ່ນບໍ່ຕາຍກັບອັນນີ້ແລ້ວ, ມັນກໍ່ບໍ່ພົ້ນກົກໄມ້ໃຫຍ່ຫັ້ນແລ້ວເປັນທີ່ກຳບັງ. ເຂົາມາແຕ່ພຸ້ນແລ້ວ ເຕົ້າໂຮມປະຊາຊົນ 03-04 ບ້ານ ເອົາມາລວມຢູ່ບ້ານດຽວ, ນຳພາປະຊາຊົນໄປຮອດຕີນພູ ແລ້ວຊິເຮັດແນວໃດ ລະບາດນີ້ ມີແຕ່ໃຫ້ທວຽດເຮົາຫັ້ນຕີສັດຕູລຽນຕິດ ເພື່ອໃຫ້ມັນຂຶ້ນຢູ່ຈອມພູ ເພາະປະຊາຊົນໄປບໍ່ໄດ້ 05-06 ບ້ານ ເຂົາຢູ່ຕີນພູໝົດ ບໍ່ຈັກຊິເຮັດແນວໃດ.

ອາອື່ງກໍ່ເວົ້າກັບທວຽດແລ້ວ, ໃຫ້ທວຽດເຮົາຕີໃຫ້ສັດຕູຂຶ້ນຢູ່ຈອມພູ ປະຊາຊົນຈຶ່ງວ່າໄປໄດ້, ໄປແລ້ວເຕົ້າໂຮມກັນບໍ່ໄດ້ຊ້ຳ ຂອງວ່າຍົນມາຍິງ, ຍົນ B52 ຍິງໃສ່ລຽນຕິດ. ລວມກັນຢູ່ຫັ້ນລະມີ 8, ບ້ານຢູ່ໃນຫ້ວຍຫຼວງຫັ້ນແລ້ວການກິນການຢູ່ກໍ່ຂາດໆເຂີນໆ. ຄິດອີ່ຕົນຊາດປະຊາຊົນແດ່ ກໍ່ປານນັ້ນ, ເຂົາໄປໂຮມຢູ່ຫັ້ນມີແຕ່ສ່ວນໃດສ່ວນໜຶ່ງເທົ່ານັ້ນ, ຍັງ 03-04 ສ່ວນພຸ້ນ ເຂົາໄປບໍ່ໄດ້, ຂອງແນວວ່າຍົນມັນມາຍິງຢູ່ຈັ່ງຊັ້ນຕະຫຼອດເວລາ ເຂົາຢ້ານຍົນຍິງຕາຍ

---

14 ທະຫານທວຽດນາມເໜືອຢູ່ຕີນພູ, ທະຫານຫຸ່ນໄຊງ່ອນຢູ່ເທິງພູ

15 ທະຫານທວຽດນາມເໜືອຍ້ອງອາອື່ງ.

ຈຳເປັນເຂົາກໍ່ເຝົ້າຢູ່ຫັ້ນ ຈົນໄດ້ 12 ມື້, ທາງເຮົາຈຶ່ງແຊກເຂົ້າໄປຢູ່ນຳປະຊາຊົນຫັ້ນໄດ້. ບາດນີ້ເຂົາໄດ້ລາຍງານວ່າ ປົດປ່ອຍພູບີແລ້ວວ່າຊັ້ນ ແຕ່ອາອຶ່ງຍັງຄຶດວ່າປົດປ່ອຍອີ່ຫຼີແທ້ເບາະ, ຍັງຢູ່ຫວາ ສັດຕູທີ່ຢູ່ເທິງພູຫັ້ນ? ຄັນປົດປ່ອຍເຂົາຊິເວົ້າແນວນີ້ບໍ່ ຫຼືວ່າ : ສັດຕູສັ່ງໃຫ້ຄົນມັນເມືອຊື່ໆ ຫຼືບໍ່ ກໍ່ອາດຈະມີແຜນ ອັນໃດອັນໜຶ່ງອີກ.

ທາງເຮົານີ້ກໍທຳມະດາຫັ້ນແລ້ວຂອງຮູ້ຢູ່ວ່າຍັງບໍ່ທັນປົດປ່ອຍ ແຕ່ເຂົາວ່າປົດປ່ອຍແລ້ວຊື່ໆ ເຊິ່ງມັນເປັນກົນຫຼອກລວງ, ເພາະວ່າຢາກໃຫ້ສັດຕູຫັ້ນເມືອ, ແລ້ວສັດຕູກໍ່ບໍ່ເມືອເພາະມັນຮັກສານາຍພົນມັນ ນາຍພົນທຽນວັນເທາະຫົວໂປ່ມັນ, ແຕ່ຕອນນັ້ນຈັບບໍ່ໄດ້ມັນໜີກ່ອນ ມັນໄປຢູ່ພູບີພຸ້ນ ເວລານັ້ນ ເຂົາວ່າປົດປ່ອຍແລ້ວ ເພື່ອຍົວະມັນລົງມາແຕ່ພວກມັນໜີກ່ອນແລ້ວ ຂອງມັນຮູ້ຈັກເດ ມັນກໍ່ໃຫ້ຍົນມັນມາເອົາໄປແລ້ວ. ສ່ວນທາງອາອຶ່ງນີ້ຂຶ້ນໄປຮອດກໍ່ ໄດ້ແຕ່ເຄື່ອງຂອງມັນ: ເກີບກໍ່ແມ່ນເກີບມັນ, ສົ້ງເສື້ອນີ້ກໍ່ສົ້ງເສື້ອມັນ ປືນຄົບຊຸດໃຫ້ອາອຶ່ງ, ອາອຶ່ງກໍ່ເມືອໄປເອົາລົດມາຮັບເອົາ, ໄປຮອດພຸ້ນ ໄປປະໄວ້ດົງໜອງຕາແສງຊຽງຮົ່ມພຸ້ນ. ໄປປະໄວ້ພຸ້ນມີແຕ່ສົ້ງເສື້ອຂຽວ ອາຍາເອີຍ ໄປຮັບມີແຕ່ສົ້ງເສື້ອພວກມັນໝົດ. ໝູ່ຢາກໄດ້ແຕ່ເຄື່ອງຜູ້ລະຊຸດເທົ່ານັ້ນ ເພື່ອຈະໃຊ້ແຜນເອົາທະຫານເຮົາໄປເຮັດເປັນຄົນມັນ ເພື່ອຈະໄປບອກໃຫ້ມັນລົງ, ກາຍນັ້ນຫວຽດເຮົາຢາກດັບສູນທຸ່ນໄຊງ່ອນຖິ້ມ. ພວກທີ່ມັນຕາຍຫັ້ນກໍ່ບໍ່ໃຫ້ເວົ້າ, ເວົ້າບໍ່ໄດ້ແລ້ວອັນນີ້. ຄົນເຮົານຸ່ງເຄື່ອງທະຫານໄຊງ່ອນ ເພື່ອໄປຈັບ ທຽນວັນເທະນັ້ນ, ມັນເຊື່ອວ່າພວກອາອຶ່ງເປັນທະຫານໄຊງ່ອນ, ເປັນທະຫານພວກມັນ, ເອີມັນເຊື່ອໂຕນັ້ນລະ, ບາດໄປແລ້ວເຫັນມີແຕ່ເສື້ອຂຽວໝົດ ທີ່ແທ້ພັດມີແຕ່ທະຫານລາວອິດສະຫຼະປົດປ່ອຍໝົດ, ກໍກາຍໄປບ່ອນປົດມັນຢູ່ແລ້ວ ທະຫານພວກເຮົາກໍ່ດັບສູນພວກມັນຢູ່ຫັ້ນ ເກືອບວ່າບໍ່ມີໃຜເຫຼືອຈັກຄົນ ໂອຍ! ອັນນີ້ຄັນຊິເວົ້າແລ້ວ ສີ່ບັ້ນຮົບ ບໍ່ທໍ່ບັ້ນຮົບລຳເຊີນນີ້, ແຕ່ກີ້ເຂົາວ່າບັ້ນຮົບຕະຫລົກຫວຽດ ກໍ່ບໍ່ທໍ່ອັນນີ້ຫັ້ນແລ້ວ ຄັນອາອຶ່ງສ້າງແຜນການຄວາມລັບດີ ກໍ່ຈະໄດ້ຮັບຜົນສຳເລັດຢ່າງສະຫງ່າງາມ ໃນໄລຍະນັ້ນແມ່ນວຸ່ນວາຍຫຼາຍ ບໍ່ໄດ້ຖາມ

ຫວຽດເລີຍເລື່ອງຈັບຫຽງບວັນເທະທັ້ນ ບາດຈັບຕົວຈິງແລ້ວ ຈະມີແຕ່ຄົນອາອື່ງຈັບ ຄັນເຈົ້າໄປຖາມນຳຫວຽດວ່າຜູ້ໃດ ເອົາໄປກໍ່ບໍ່ຮູ້ໃດ ຄັນຊິເວົ້າແລ້ວ ຖ້າອາອື່ງບໍ່ໃຊ້ກົນອຸບາຍໃຫ້ອ້າຍນ້ອງປອມເປັນທະຫານທຸ່ນໄຊງ່ອນນັ້ນ ແມ່ນຈັບມັນບໍ່ໄດ້ຊ້ຳ, ຄັນຍັງຈັບບໍ່ໄດ້ ພວກເຮົາກໍ່ຍັງຊິນອນແຕ່ຢູ່ໃນຂຸມທັ້ນລະ ປືນກໍ່ແປະໄວ້ທັ້ນ, ບາໂລກໍ່ແປະໄວ້ທັ້ນ ແລະ ກໍ່ເຫັນມັນລີ້ຢູ່ທັ້ນ ໄດ້ແຕ່ແນມຢູ່ຈັ່ງຊັ້ນ ຂອງແນວວ່າເຝົ້າຍາມກັນຊື່ໆເດເນາະ. ເຂົາຍັງສູ້ເຂົາວ່າ ທຽງບວັນເທາະທັ້ນເຂົາບໍ່ຮູ້ເລີຍແລ້ວ ເຂົາກໍ່ມີຄົນໃໝ່ມາປ່ຽນແດ່ ແລ້ວບ່ອນດົງທັ້ນ ກໍ່ບໍ່ແມ່ນໜ້ອຍ ບ່ອນເຂົາຢູ່ນັ້ນຍັງຫຼາຍປະໄທ ຢູ່ບ່ອນດົງທັ້ນ ອາອື່ງໄປເຫັນແລ້ວ. ອາອື່ງວ່າ ເພິ່ນມາຄິດເບິ່ງ ໂອ! ຕາຍແນ່ນອນ ເພິ່ນວ່ານີ້ ອາອື່ງໄປເບິ່ງທາງເຮົາແນ່ ທາງເຂົາແນ່ ແລ້ວມາລົມຫຽບ ໃສ່ກັນຢູ່ທາງເຂົາ ມ່ວນລະບໍ, ເບິ່ງວ່າເຂົາຖືເຄື່ອງຂອງເຂົາຍົກຂຶ້ນ ເຂົາຊິໄດ້ເຄື່ອນທີ່ແລ້ວເດ. ບາດນີ້ອາອື່ງໄປທາງພຸ້ນ ທາງພູຢູດ ຈຸອາອື່ງໄປລົມທົບກັບກອງພັນຫວຽດນາມ 304 ເຊິ່ງຫົວໜ້າກອງພັນຕອນນັ້ນແມ່ນສະຫາຍຮິ່ງ, ຜູ້ຮອງຊື່ສະຫາຍດາວ. ຄັນເວົ້າແລ້ວຈຸອາອື່ງໄປຊັບຊ້ອນນຳເຂົາ, ໄປນຳພາເຂົາ ເຂົານຳພາຊິເວົ້າແນວໃດກໍ່ໄດ້. ຄວາມຈິງມັນຢ້ານຕາຍເພາະວ່າມັນບໍ່ຮູ້ທາງ, ບໍ່ຮູ້ທ້ອງຖິ່ນພວກເຂົາຈຶ່ງເອົາຄົນທ້ອງຖິ່ນຄືໄທເພິ່ນນີ້ໄປນຳ[16], ທັງກອງຫຼອນ ແລະອາອື່ງໄປຂຶ້ນທາງພູຢຸດເບິ່ງສັດຕູຈັບປະຊາຊົນຢູ່ບ້ານສະເດັນກັບບ້ານປະຢູດເສັດເລີຍ, ມັນເອົາໄປໝົດເລີຍ.

ຫວຽດໄຊງ່ອນມັນເຮັດວຽກເສັດເລີຍບາດກັບມາທັ້ນແຕ່ປະຢູດທາບ້ານບົກທັ້ນພວກອາອື່ງເຫັນສັດຕູຢູ່ນີ້ກອງພັນໜຶ່ງ, ເຂົ້າມາຈັກຊິເຮັດແນວໃດ, ອາອື່ງຢູ່ທັ້ນແລ້ວເພິ່ນໄປຢູ່ພູ ບ້ານບຸກພູກະຈາບ ໄປສັ່ງເອົາປືນໃຫຍ່ມາຍິງ. ບາດນີ້ຈຶ່ງເຄື່ອນໄປບຸກພູກະຈອກທາງເຮົາຕີກໍ່ຖືກປະຊາຊົນອີກ, ຂອງວ່າປະຊາຊົນເຮົາໄປຢືນສວນກັບເຂົາແລ້ວເຂົາຂຶ້ນກ່ອນ. ບາດນີ້ອາອື່ງຍິງປືນໃຫຍ່ 06 ລູກປືນນ້ອຍຍັງບໍ່ໄດ້ຍິງ ອາອື່ງຍິງປືນໃຫຍ່ກ່ອນ ແລ້ວຈຶ່ງໄດ້ຍິນສຽງເດັກນ້ອຍ

---

16 ທະຫານຂອງລຸງອາອື່ງ ນຳພາທະຫານຫວຽດນາມເໜືອ ເພາະເຂົາບໍ່ຮູ້ທາງ ແລະພູມີປະເທດ ຈຶ່ງເອົາຄົນທ້ອງຖິ່ນໄປນຳທາງ.

ໄຫ້ອີກ ຍິ່ວໆ! ຕີຢູ່ໃສມີແຕ່ສຽງເດັກນ້ອຍ, ຂອງແນວວ່າມັນມີປະຊາຊົນເປັນຕົວປະກັນ. ບາດນີ້ພວກທຸ່ນໄຊງ່ອນໄລ່ປະຊາຊົນເມືອ, ຈຸປະຊາຊົນເຮົາກໍ່ຫ້າມກັນບໍ່ໃຫ້ມາ, ເຈົ້າຫ້າມຂ້ອຍ ຂ້ອຍຫ້າມເຈົ້າຢູ່ ຫ້າມບໍ່ໃຫ້ຍິງ, ຖ້າໜີຈາກມັນຍ້ານວ່າມັນຈະສັ່ງຍິນມາຍິງ ແລະພວກທຸ່ນໄຊງ່ອນ ເຂົາມາຫ້າມທາງເຮົານີ້ຂອງວ່າເຂົາຈັບປະຊາຊົນເຮົາສອງບ້ານຫັ້ນ. ຄົນເຮົາຢູ່ກັບມັນກໍ່ມີ ທີ່ມັນຈັບໄປເປັນຕົວປະກັນຫັ້ນ. ໄປຮອດຕູບລັບ ອາອື່ງ ລັດຈັບຢູ່ຫັ້ນ ທາງທຸ່ນໄຊງ່ອນນັ້ນຈຸໜຶ່ງເຂົາກໍ່ປົບຄືກັນ, ອີກຈຸໜຶ່ງເຂົາ ມາສິ່ງ ປະຊາຊົນເຮົາແມ່ນ ຈຸຖືກເຈັບເຂົາຢ້ານຍິນຍິງ.

ກໍ່ແມ່ນທຸ່ນໄຊງ່ອນມາສິ່ງປະຊາຊົນ. ພວກອາອື່ງຕີກັບມັນເມື່ອກີ້ຫັ້ນ, ຂອງວ່າມັນຢ້ານພວກອາອື່ງຕື່ມອີກເດ, ມັນກໍ່ເຫັນລະບໍ່ບ່ອນອາອື່ງຕີຫັ້ນ, ມັນມາສິ່ງໃຫ້ຫວິດຫັ້ນ ມັນວ່າເລື່ອງຍິນຫັ້ນຮັບປະກັນ ເຂົາກໍ່ຮັບປະກັນຄືກັນບໍ່ໃຫ້ຍິນຍິງ ເຂົາໄດ້ໂທໄປບອກຮຽບຮ້ອຍແລ້ວ.

ບາດນີ້ສັດຕູຂຶ້ນຢູ່ພູກະລ້ອກນັ້ນ ພວກອາອື່ງກໍ່ຍັງບໍ່ຮູ້ຈັກກັບຫວຽດໄຊງ່ອນຢູ່ຫັ້ນປານໃດ, ຢູ່ບໍ່ຢູ່ປານໃດກໍ່ຕຶ່ງຕັ້ງໂລດ ເຂົາຍິງມາຖືກກອງຫຼອນພວກອາອື່ງ 02 ຄົນ ທາງສັດຕູຍິງຈຸອາອື່ງ ກ່ອນຢູ່ຫັ້ນແລ້ວ ຖືກມັນຫຼອນຕີກ່ອນ ທາງຫວຽດກໍ່ມີຈຳນວນໜຶ່ງເສຍຊີວິດ, ອາອື່ງກໍ່ບໍ່ໄດ້ນັບທາງກອງຫຼອນຝ່າຍພວກເຮົານັ້ນ ສອງຄົນເສຍຊີວິດຢູ່ຫັ້ນເລີຍ ມີສະຫາຍປືນ ແລະ ສະຫາຍອາກຊີງ ເປັນກອງຫຼອນຜູ້ທີ່ອາວຸໂສອາຍຸພວກເພິ່ນປະມານ 40 ປາຍປີນີ້ລະ ເມື່ອເຫັນເປັນແນວນັ້ນ ພວກອາອື່ງກໍ່ຫັນທິດ ແລ້ວລົງທາງນີ້ເພື່ອຕັ້ງທັບໃໝ່, ແລ້ວກໍ່ຕີຕັດຫຼັງພວກມັນເຮັດໃຫ້ພວກມັນທັງກອງພັນນັ້ນ ແຕກສຸຜຸພ່າຍ ພວກອາອື່ງຕີລົງໄປຮອດພຸ້ນຮອດພູ ພູຈະກີ້ບ່ອນເຂົາຢູ່ຫັ້ນ. ບາດນີ້ກໍ່ກັບມາບ່ອນເກົ່າພີ້ອີກ ຄັນຊິເວົ້າແລ້ວພວກເພິ່ນຕີຕັດຫຼັງພີ້ ແລ້ວກໍ່ກັບຄືນມາຕີທາງໜ້າອີກ, ຕີໄປໝົດທຸກຮູບທຸກແບບເລີຍໜາ, ຕີປ້ອງໃຫ້ທະຫານທຸ່ນເຂົ້າມາຢູ່ຮ່ວມບ່ອນດຽວກັນ ສ່ວນໝວດເດັກນ້ອຍ ແລະປະຊາຊົນນັ້ນກໍ່ໃຫ້ມາຢູ່ບ່ອນດຽວໝົດ, ຕີຕ້ອນໄປບ່ອນລະເລັກລະນ້ອຍ ເພື່ອໃຫ້ໄປຢູ່ບ່ອນ

ດຽວໝົດເປັນຈຸໃຫຍ່ ຄັນຕີແລ້ວໆ ອາອື່ງກໍ່ເມືອເຂົ້າບ້ານດົງນັ້ນແລ້ວ ເພື່ອໄປສືບເບິ່ງວ່າ ມັນຈະໄປຕາມແຜນຂອງເຮົາຫຼືບໍ່ ເມື່ອຮອດບ້ານດົງແລ້ວມີສອງຄວາມທີ່ເຂົາລາຍງານວ່າ ພວກຫຸ່ນໄຊງ່ອນພັ້ນມັນເມືອເຄິ່ງໜຶ່ງ ມີຜູ້ສະໝັກພັ້ນອີກເຄິ່ງໜຶ່ງ ກໍ່ແປວ່າ ມັນຕ້ອງຕາຍເຄິ່ງໜຶ່ງ ແລະຍັງມີຊີວິດເມືອເຄິ່ງໜຶ່ງ ຄັນມັນຍັງຢູ່ກໍ່ຕາຍໝົດເສັດຄືກັນ ສ່ວນຫຼາຍເຂົາບໍ່ໄດ້ມີທາງລົດດອກ ມີແຕ່ເມືອທາງຍົນ ອາອື່ງວ່າ ໃຫ້ເຂົາຍ່າງເມືອກໍ່ໄດ້ໝາ, ຂອງວ່າເຂົາຫຼາຍ 80 ກອງພັນ[17], ມັນເມືອລາຍງານ 30 ກອງພັນຕາຍ ເຫຼືອ 50 ກອງພັນ ຂອງວ່າຈຳນວນລົງມາຢູ່ທີ່ນີ້ 3 ກອງພົນ, ຫົວໜ້າແມ່ນໝໍເທາະ ຫຼືເອີ້ນ ວ່າຫງຽນວັນເທາະ ຄັນດ້ວຍມີຕໍ່ມີພັ້ນຍາກເຕີບ, ຂອງວ່າມັນລະມີຫຼາຍບ່ອນຫຼີບ ທັງຍິນ ທັງລົດຕັງ, ທັງປືນໃຫຍ່ ປືນນ້ອຍ ມັນມີຄົບຢູ່ມໍລະກົດນີ້ ບໍ່ແມ່ນງ່າຍ, ເບິ່ງມັນເອົາລົງລົດ ມັນເອົາມາທາງເລກ 9 ນີ້ ອັນນັ້ນຕ່າງຫາກ ອັນມັນຍ່ອນລົງກໍ່ຕ່າງຫາກອີກ ບາດນີ້ປົດປ່ອຍແລ້ວ ຫຸ່ນໄຊງ່ອນໄປຮ່ວມ ຢູ່ຫ້ວຍຈະກີ້ ອາອື່ງກໍ່ຍັງບໍ່ທັນໄດ້ປະຫວຽດນາມ ແລະເຂົາກໍ່ປະອາອື່ງໄປ ຮອດຫ້ວຍຈະກີ້ພັ້ນ ອາອື່ງບອກຫຸ່ນໄຊງ່ອນວ່າ: ໃຫ້ພວກເຈົ້າເມືອເດີ, ຄັນບໍ່ເມືອເຈົ້າຊິເຮັດແນວໃດ. ເຄິ່ງໜຶ່ງເມືອ ເຄິ່ງໜຶ່ງຢູ່ຫ້ວຍຈະກີ້ພັ້ນ, ເວົ້າແນວນັ້ນ ຈຸໄຊງ່ອນບໍ່ສັ່ງພັດໄດ້ເມືອ ແຕ່ຈຸເຂົາສັ່ງພັດບໍ່ໄດ້ເມືອ, ຈຸໜຶ່ງຖືກເຝົ້າຢູ່ຫ້ວຍຈະກີ້ພັ້ນແລ້ວຂ້າມທັງພູຈະກີ້, ເຂົາຂ້າມທັງນ້ຳເຊນັ້ນ. ໄປພູອູດນັ້ນ ຢູ່ທາງແກ້ງກົກພຸ້ນເດ ແລ້ວເຂົາພັ້ນມີປະຊາຊົນກວ່າ 60 ຄົນ, ທາງຝ່າຍໄຊງ່ອນຈັບໄປ, ແລ້ວເຂົາຢາກໄປນຳອາອື່ງ, ອາອື່ງກໍ່ຕັ້ງຢູ່ລຸ່ມພັ້ນ. ບາດນີ້ມີສະພາບວຸ່ນວາຍໄດ້, ປະຊາຊົນລົງມາຕັກນ້ຳແລ້ວອາອື່ງເຫັນ! ອາອື່ງເວົ້າວ່າ ປະຊາຊົນ! ລະວັງເດີ ອາອື່ງກະເລີຍຖາມເຂົາເບິ່ງວ່າເຈົ້າໄປຢູ່ເຮັດຫຍັງຢູ່ພູພັ້ນ ພວກເຂົາຕອບວ່າ ພວກເຮົາບໍ່ໄດ້ໄປ. ມັນຈັບບໍ? ເອີ ມັນຈັບເອົາ ຊັ້ນລົງໄວໆ ລົງໄວໆ! ພວກເຂົາມີກວ່າ 60 ຄົນ ອາອື່ງວ່າ ພວກເຈົ້າລົງໄວໆເດີ ຄັນກາຍ 5

---

17 ຈຳນວນທະຫານຫຸ່ນໄຊງ່ອນຢູ່ບັ້ນຮົບລຳເຊີນ 719 ມີເອກະສານໜຶ່ງ ວ່າຫຼາຍກວ່ານີ້, ຄືຢູ່ບົດລາຍງານ ຂອງ ລຸງທອງສີ ພະນັກງານບຳນານເມືອງເຊໂປນ.

ນາທີ ພວກເຈົ້າຕາຍກັບສັດຕູ ຢູ່ນີ້ ! ເມື່ອປະຊາຊົນລົງວິດແລ້ວກໍ່ເອົາໂລດ, ພວກອາອື່ງຍິງລູກໜຶ່ງບໍ່ແຕກ, ກາຍທັ້ນພວກທຸ່ນໄຊງ່ອນປີນນຳເກືອບບໍ່ທັນ, ອາອື່ງໄດ້ຍິງປືນນ້ອຍ ເອົາປືນໃຫຍ່ຍິງ ຢູ່ພູອູດທັ້ນຍິງກວດລ້າງເດ. ປົດປ່ອຍໄດ້ມີສັດຕູຫຼາຍເຕີບ ປະມານ 2 ກອງພັນພຸ້ນຢູ່ຫ້ວຍທິວຂິວ, ຫ້ວຍຈະກີ້ທັ້ນ ແລະແຖວພູອູດຢູ່ແກ້ງກົກທັ້ນ, ແນມເບິ່ງສ່ຳເຈົ້າກົກກ້ວຍທາມກົກທາມປາຍ ລຽນກັນເປັນແຖວເລີຍ. ຄັນເວົ້າລວມແລ້ວ ເຂົານັ່ງຢູ່ກໍ່ຕາຍ ນອນຢູ່ກໍ່ຕາຍ, ຄັນອີງແນວນີ້ກໍ່ຕາຍ ແບບນີ້ລະ ຂອງວ່າປືນໃຫຍ່ຍິງເອີ່ຍ ຖືກລົມມັນຕີແຮງ ເດ. ນອກຈາກປົດປ່ອຍພູອູດແລ້ວທັ້ນ, ພວກອາອື່ງກໍ່ໄປຕີທະຫານທຸ່ນໄຊງ່ອນ. ເດັກນ້ອຍທັ້ນໃຫ້ໄປລວມກັນຢູ່ລະບາວພີ້, ແລ້ວກອງຫຼອນ ອາອື່ງຕາຍຢູ່ຫ້ວຍລົ້ວທັ້ນ 3 ຄົນ, ຖືກຈັບ 2 ຄົນ. ອາອື່ງເຂົ້າໃຈແລ້ວບາດນີ້ ຂອງວ່າທະຫານຂອງອາອື່ງຕາຍລຽນຕິດ, ທະຫານໄຊງ່ອນຂອງມັນກໍ່ຕາຍຄືກັນ ເຮັດສົງຄາມບໍ່ຕ່າງຫຍັງກັບສະນ້ຳໃສ່ກັນ ສູ່ຄົນສູ່ປຽກ, ເຮົາກໍ່ຕາຍເຂົາກໍ່ຕາຍ. ມັນກໍຫຼາຍຄັນເວົ້າລວມແລ້ວທັ້ນ ອາອື່ງໄລ່ມັນໄປລວມກັນ, ນີ້ອາອື່ງໃຊ້ແຕ່ ປືນນ້ອຍ ຂອງວ່າເພິ່ນໄລ່ມັນໄປ ມັນກໍ່ຫ້ອນກັນໄປແມ່ນບໍ? ອາອື່ງກໍ່ຕີມັນໄປເລີຍໆ ຖູມັນໄປເລີຍໆ. ທາງອາອື່ງກໍ່ຕາຍທາງມັນກໍ່ຕາຍ, ມັນກໍ່ເມື່ອຍ ອາອື່ງກໍ່ເມື່ອຍຄືກັນແລ້ວ, ກໍ່ສັ່ງໃຜສັ່ງມັນແລ້ວ ກໍ່ຕີກັນຢູ່ບ່ອນທັ້ນຖືກເຈັບ 2 ຄົນ, ໃຫ້ໂຕຈົດໄວ້ລະອຽດ ອັນນີ້ລະເອົາມາ 3-4 ເທື່ອ ອັນນີ້ລະເປັນຜົນເສຍຫາຍເວລານັ້ນ ຢູ່ຫ້ວຍລົວທັ້ນຊື່ວ່າ ທ້າວອາເນີ້ຍ ກັບທ້າວອາເລະ ຜູ້ທີສາມແມ່ນທ້າວອາເປີ້ຍ, ຜູ້ຖືກບາດເຈັບແມ່ນທ້າວອອນຂາຫັກ, ຖືກເຈັບແລ້ວຕາຍເລີຍນະ, ອາອື່ງເອົາໄປໂຮງໝໍບໍ່ທັນຕາຍຢູ່ນຳທາງ, ກັບທ້າວອາດີ້ທັ້ນ. ໂອຄັກໃດບັກຈ່ອຍທັ້ນ ມັນເຮັດລະອຽດ ມັນບໍ່ຢ້ານຫຍັງອີ່ຫຼີ ບັກຈ່ອຍທັ້ນກອງຫຼອນມັນມີຢູ່ 7 ຄົນ, ກອງຫຼອນອາອື່ງໄປຮອດລາວບາວ ຫວຽດຮ່າໂນ້ຍບໍ່ໃຫ້ໄປຕໍ່, ເຂົາໃຫ້ຂຶ້ນຂວາຍປະຊາຊົນ, ແລ້ວເຂົາໃຫ້ອາອື່ງໄປຄົ້ນຄວ້າຊອກຫາປະຊາຊົນ ຈັກຢູ່ບ່ອນໃດຕາຍ ບ່ອນໃດຍັງ ແລະດ້ານອາຫານການກິນ ເປັນເຂົ້າເປັນນ້ຳ ເຮັດແນວໃດດີບາດນີ້. ເຂົາໃຫ້ເຈົ້າໄປຂຶ້ນຂວາຍ

ປະຊາຊົນເດີ, ຄັນເຫັນສາງເຂົ້າສາງນ້ຳຢູ່ໃສລະເອົາໃຫ້ເຂົາກິນເດີ, ຂອງວ່າ ຕອນນັ້ນ ປະຊາຊົນຢູ່ແຕ່ໃນຂຸມບໍ່ໄດ້ກິນຫຍັງເດ ໄປຮອດລະບາວ ເຂົາໃຫ້ອາອື່ງໄປຄົ້ນຄວ້າຫາແລ້ວບາດນີ້, ເຂົາຕີເຂົາເອງຢູ່ພູຫັ້ນ ບາດນີ້ຫວຽດມິນກັບຫວຽດໄຊງ່ອນ, ຂອງວ່າອາອື່ງບໍ່ໄດ້ໄປນຳເຂົາເດ ຈຸຄົນລາວບໍ່ໄດ້ໄປນຳຈັກຄົນເລີຍ.

ບັ້ນຣົບລຳເຊີນປົດປ່ອຍຢ່າງສິ້ນເຊີງຫັ້ນເປັນເວລາແທ້ໆ 43 ວັນ, ນັບແຕ່ມື້ມັນເຂົ້າມາຈົນ ຮອດມື້ສຸດທ້າຍ ບາດນີ້ຈຸນີ້ປົດປ່ອຍທາງຫວຽດນາມແລ້ວ, ທາງດານັງພຸ້ນກໍ່ຕ່າງຫາກ, ທາງອາອື່ງຕີໃຫ້ເຂົາໄປທາງພຸ້ນ, ເຂົາຢູ່ທາງນັ້ນຕີເຂົ້າມາ. ທາງຈຸໄຊງ່ອນກໍ່ຕ່າງຫາກ, ຄົນທາງອາອື່ງນີ້ໄປຕີຕ່າງຫາກຕີກັນເວລານັ້ນມັນມີຫຼາຍກຸ່ມ, ທາງຝ່າຍສັດຕູມີທັງລົດຕັງ, ທາງຝ່າຍເຮົາກໍ່ມີຄືກັນລົດຕັງຊະນິດລອຍນ້ຳກໍ່ມີ[18]. ອາອື່ງໄດ້ຍິນສຽງເຂົາມາຕຶກໆໆ ໄປໂລມາແຕ່ນ້ຳພຸ້ນ ອຶກກະທຶກສຽງເຂົ້າມາບັກຫຼາຍ, ເບິ່ງເຂົາຈັບອາເມລິກາໄດ້ບ່ອນກົງຈີ້ຫັ້ນເຂົາວ່າສະເພາະແຕ່ອາເມາລິກາຫັ້ນ ແມ່ນ 30,000 ຄົນ ແລະທາງອາອື່ງນີ້ຈັບໄດ້ອີກ, ທາງຫວຽດນາມກໍ່ຈັບໄດ້ອີກ ຕອນຕີກັນຢູ່ບັ້ນຣົບລຳເຊີນຫັ້ນ. ຫວຽດເວົ້າວ່າໄດ້ຮອດ 3 ລ້ານຄົນ. ຫຼາຍຄົນກໍ່ເວົ້າວ່າອາເມລິກາມັນບໍ່ໄດ້ມາຫຼາຍປານນັ້ນຕິ? ຊິບໍ່ຫຼາຍຈັ່ງໃດ ເບິ່ງມັນແກ່ໃສ່ລົດໃຫຍ່ມາເປັນກອງຫັ້ນ, ສ່ວນພວກອາອື່ງກໍ່ຢູ່ເຮືອນນຳປະຊາຊົນນີ້ແລ້ວ, ອາອື່ງວ່າ ທຸກສ່ວນປະຊາຊົນຄິດວ່າ ຄັນບໍ່ເຮັດແບບນັ້ນແລ້ວ ກໍບໍ່ແພ້ມັນ, ຍິນມັນບໍ່ແມ່ນໜ້ອຍໄປເພີ່ນ.

ຢູ່ບັ້ນຣົບລຳເຊີນ ອາອື່ງເພິ່ນເຮັດຢູ່ນີ້ລະ ຢູ່ກັບເຂດທີ່ເພິ່ນຮັບຜິດຊອບນີ້, ຄັນເຂົ້າມາຢູ່ເຮືອນເຂົາໃຫ້ຮັບຜິດຊອບຄືນ ວຽກງານກຳມະການກອງຫຼອນຫັ້ນ, ເພິ່ນບໍ່ມີຊື່ເດ ເວລານັ້ນບໍ່ມີເງິນກິນ, ບໍ່ໄດ້ສິ້ງເສື້ອເວລານັ້ນ ມີແຕ່ຈິດໃຈຊື່ໆ. ແລ້ວບາດນີ້ເຂົາປົດປ່ອຍທົ່ວປະເທດ, ເຂົາເຂົ້າຢຶດອຳນາດຢູ່ສະຫວັນນະເຂດນີ້, ອາອື່ງກໍ່ຍັງຢູ່ໃນເມືອງ. ປີ 1971-1973 ພວກອາອື່ງອອກຂອງວ່າເຂົາໄປຕັ້ງເມືອງຢູ່ນີ້ເດ, ຍິນກໍ່ບໍ່ໄດ້ຍິງອີກແລ້ວ, ທະຫານອາເມລິກາ

---

18 ລົດຕັງທາງເຮົາແມ່ນລົດຕັງໂຊຫວຽດ ລອຍນ້ຳໄດ້ສະບາຍ.

ກໍ່ບໍ່ໄດ້ຍິງດິນລາວອີກແລ້ວ, ພວກທຽດລະເວົ້າວ່າ ຄັນມັນຍັງຍິງຢູ່ ກໍ່ໝາຍຄວາມວ່າ ສົງຄາມຍັງດຳເນີນຕໍ່, ແຕ່ແລ້ວ ນັບແຕ່ນັ້ນມາ ກໍຢຸດຍິງເລີຍ. ບາດນີ້ອາອື່ງອອກໄປຢູ່ເມືອງເຊໂປນເກົ່າ, ປີ 1975 ຍຶດອຳນາດ ກໍ່ແມ່ນທະຫານພວກອາອື່ງນີ້ລະ, ຕອນນັ້ນໄດ້ມີລຸງໝູຮັກລົງມາແຕ່ພຸ້ນເພິ່ນ ຖືກຮັບຜິດຊອບຢູ່ສະຫວັນນີ້. ບາດນີ້ພະນັກງານທະຫານກອງຫຼອນບໍ່ຢາກໄປ ຂອງວ່າແລ້ວເສິກແລ້ວເນາະ ບໍ່ໄຂ້ກະວ່າໄຂ້ ເບິ່ງຈຸຕາແສງບ້ານດົງ ກັບ ອ້າຍເຜີຍນີ້ຈິນວ່າຈັກເອົາແມ່ນຫຍັງມາທັບໃສ່ຕີນຫັ້ນ ເພື່ອໃຫ້ມັນໃຄ່ສໍ່ານີ້ພຸ້ນ ໝາຍຄວາມວ່າບໍ່ຢາກໄປຫັ້ນ. ພໍ່ບັດນີ້ກໍ່ເຈ່ຍບາໂລ ໄປເອົາຮາກໄມ້. ມີພໍ່ລຸງໜຶ່ງລາວວ່າ ຂ້ອຍໄຂ້ນີ້, ລາວເວົ້າວ່າປະໃຫ້ພໍ່ລຸງໄປສາ ເຮົາຕາຍກໍ່ຢ່າ ລາວເວົ້າວ່າ, ແລ້ວອາອື່ງຜິດກັນກັບເຈົ້າເມືອງ, ອາອື່ງຢາກໄປລາວພັດໃຫ້ຢູ່ ຂອງວ່າຄົນໝົດແລ້ວເດຢູ່ໃນເມືອງນີ້ ອາອື່ງຢາກໄປ. ອັນນີ້ແລ້ວ ລາວບໍ່ໃຫ້ໄປ ໃຫ້ອາອື່ງລາວເວົ້າວ່າ: ເຈົ້າໄປຕາຍ ອາອື່ງວ່າ ຕາຍກໍ່ຕາຍ, ອາອື່ງວ່າຕາຍຖ້າຢູ່ສົງຄາມຜູ້ດຽວ ບໍ່ມີໃຜຮູ້ຈັກ, ອັນນີ້ຄັນອາອື່ງໄປມີຫຼາຍຄົນ ຮູ້ຈັກຢູ່ດອກ, ຄັນຕາຍກໍມີຄົນຢູ່ເມືອງໃຫຍ່ຮູ້ຈັກ ມີເຈົ້າມີນາຍຮູ້ຈັກ. ຖືວ່າອາອື່ງນີ້ກັບອ້າຍຂອງເພິ່ນຫັ້ນມີຜົນງານຫຼາຍ ມີຫຼາຍຄືກັນໝົດ. ເສຍໃຈທີ່ອາອື່ງບໍ່ໄດ້ຢູ່ໃນຕອນນັ້ນ ຂອງວ່າອ້າຍອິນກອງຕອນອາອື່ງໄປສຳພາດຫັ້ນ ລາວກໍມາຈັບບ່າອາອື່ງຢູ່, ລາວຖາມອາອື່ງວ່າ ດຽວນີ້ເຈົ້າຢູ່ໃສ, ອາອື່ງກໍ່ຕອບວ່າຊິຢູ່ໃສ ກໍຢູ່ໃນເຮືອນຫັ້ນລະ. ລາວວ່າເຮົາຄິດວ່າໂຕຕາຍແລ້ວ, ຕາຍສາເຖາະຟ້າເອີຍ, ຄັນຖອກທ້ອງແລ້ວຕາຍໄວກະຢາກຢູ່ອາອື່ງເວົ້າ ບໍ່ໄດ້ຊື່ບໍ່ໄດ້ສຽງຫຍັງ, ຈັກແມ່ນໃຜມາເອົາລາວຫັ້ນຂອງວ່າເອົາລົດມາ ເອົາຢູ່ເຮືອນຫັ້ນ. ໄປບໍ່ຮອດສູນກາງຊ້ຳຕີ່ເບາະ ຄືຊິຮອດແຕ່ສະຫວັນນີ້ ຂອງເຮົາສຳພາດທຽດ ຕອນນັ້ນກໍ່ຢູ່ສະຫວັນນີ້, ສັງໄລກໍ່ຍັງຢູ່ຍັງບໍ່ທັນຕາຍຕອນນັ້ນ ສ່ວນອາອື່ງບໍ່ເປັນຫຍັງອາອື່ງກໍ່ໄປຊື່ໆ. ຍາກນີ້ໂອ່! ບາດນີ້ອາອື່ງໄປກັບອ້າຍແປໄປແລ່ວເຂົາກໍ່ຈື່ມ, ແຕ່ລຸງບຸນກອງນັ້ນເສຍແລ້ວ, ອາອື່ງຮູ້ແລ້ວ, ບາດນີ້ອ້າຍອິນກອງເວົ້າວ່າ: ຕອນຈຸເຂົາມາເອົາຜົນງານຫັ້ນວັນທອງຄົນຕະໂອ້ຍ, ກໍໄດ້ເຮັດໜັງສືຄັກແນ່, ອາອື່ງ

ກໍໄດ້ຫຼຽນຄຳຄັກແນ່ເກາະ ອ້າຍອິນກອງຫັ້ນມາເຮັດຫຼຽນໄຊຊັ້ນ 2, ອາອຶ່ງໄດ້ໄປເອົາດ້ວຍໂຕເອງນີ້ແລ້ວ. ຈາກນັ້ນ ອາອຶ່ງກໍໜີໄປເຮັດວຽກຢູ່ບ້ານຊາຍແດນເພື່ອໄປປັບປຸງຊາຍແດນ ອາອຶ່ງລາວຍອມ, ເຂົາໄລ່ພວກເຮົາໜີລຽນຕິດ. ທາງເຈົ້າແຂວງເຮົາເວົ້າວ່າ ໃຜພໍຊິໄປໄດ້ແດ່ ໄປປັບຊາຍແດນຫັ້ນ, ແລ້ວອາອຶ່ງກໍ່ສະເໜີໄປ. ເພິ່ນນຸ່ງສິ້ງເສື້ອຂາດບາໂລຂາດ, ປືນກໍບໍ່ໄດ້ ສາຍແອວສາຍຫຍັງກໍບໍ່ມີ ໄດ້ແຕ່ພັບສໍຊຽນຫັ້ນໃສ່ບາໂລໄປ. ຫວຽດເຫັນເຂົາ ມາເຫັນຖາມວ່າ: ເຈົ້າຊິໄປໃສຫັ້ນ ອາອຶ່ງໃຫ້ໄປຖາມຈຸນັ່ງຢູ່ຫັ້ນ, ພວກຫວຽດກໍຫຼາຍຄົນ, ເບິ່ງເຂົາຂັດປືນສັ້ນໝົດ. ຢູ່ນີ້ເຂົາວ່າເຂົາຢາກໄດ້ແຕ່ຄ່າບ້ານດົງຫັ້ນໄປ.ເຂົາວ່າດິນເຂົາໝົດຄ່າເມືອງພິນພຸ້ນ ຫວຽດເຂົາກໍ່ເວົ້າວ່າດິນເຂົາຫັ້ນ. ກ່ອນຊິໄດ້ຊາຍແດນຈີນວ່າຊິເກີດເສິກກັນຈຶ່ງແລ້ວ. ອັນນີ້ແລ້ວອາອຶ່ງໄປ, ອາອຶ່ງໄປຖາມຈຸອ້າຍນ້ອງເຮົາ ຕອນໄປລີ້ຊ້ອນຕອນປົບສົງຄາມນັ້ນ ເຂົາວ່າ 80 ຄອບຄົວ, ແລ້ວອາອຶ່ງໄປຖາມນຳຕາແສງ ພວກເຮົານີ້ວ່າຊາຍແດນຢູ່ບ່ອນໃດກັນແທ້, ອາອຶ່ງກໍ່ເວົ້າແນວນັ້ນໂລດ, ຫວຽດມັນຫິວ. ອາອຶ່ງຂີ່ລົດນ້ອຍໄປນຳຫວຽດ. ອາອຶ່ງນຸ່ງສິ້ງເສື້ອຂາດ ເຂົາວ່າເຈົ້າບໍ່ມີສິ້ງເສື້ອບໍ, ອາອຶ່ງວ່າບໍ່ມີ ເຂົາເອົາໃຫ້ຂ້ອຍກໍນຸ່ງແລ້ວ. ອາອຶ່ງໄປຕາແສງລະອານກ່ອນ, ໄປຖາມເບິ່ງນຳຜູ້ເຖົ້າຜູ້ແກ່ຢູ່ບ່ອນນັ້ນບ່ອນນີ້ແລ້ວ ອາອຶ່ງເອົາບາໂລລົງ, ແລ້ວໝາຍບ່ອນນັ້ນບ່ອນນີ້ແມ່ນຊາຍແດນປະເທດລາວ ອາອຶ່ງກໍ່ຖາກໆ, ແລ້ວກໍ່ຂຽນໃສ່ຕົ້ນໄມ້ຫັ້ນ, ແລ້ວກໍ່ຈົດໝາຍໄປ. ເອົາພໍ່ເຖົ້າ 5 ຄົນຫັ້ນໄປ ອາອຶ່ງຍັງບອກເພິ່ນວ່າ ຄັນຍັງມີຄົນມາຈາກວຽງຈັນຖາມຫາຊື່ເຈົ້າ ແມ່ນບໍ່ໃຫ້ເຈົ້າໄປວຽງຈັນເດີ. ແຕ່ກີ້ເຂົາບໍ່ໄດ້ຮ້ອງວຽງຈັນ [19] , ຂອງວ່າມີ 2 ກຸ່ມການເມືອງເດ, ເຂົາກໍ່ຢາກໄດ້ທັງເຂົາ, ແລ້ວທາງຫວຽດນາມກໍໄດ້ຝ່າຍຊິນຊາດພວກອາອຶ່ງນີ້, ແລ້ວເຂົາກໍມາເອີ້ນ 5 ຄົນນີ້ໄປພຸ້ນແລ້ວໆຈຶ່ງວ່າຊິໄດ້ຄືນ. ອາອຶ່ງບອກໃຫ້ເອີ້ນຜູ້ເຖົ້າຫັ້ນ ເຂົາຮູ້ຊາຍແດນແຕ່ກີ້ວ່າບ່ອນໃດເປັນບ່ອນໃດ, ເຂົາກໍ່ເອົາພ້າໄປຖາກກົກໄມ້ຖາກໄປວ່າອັນນີ້ແມ່ນແດນເຮົາ ອັນນີ້ແມ່ນແດນຫວຽດນາມແລ້ວກໍ່ຂຽນ.

19 ສອງກຸ່ມການເມືອງແປວ່າສອງຜົນປະໂຫຍດ ຂອງສອງຝ່າຍລາວແລະຫວຽດນາມ.

ສະຫາຍດິກທຽງນລາວເຮັດຢູ່ທາງທວງດນາມພຸ້ນ ແຕ່ວ່າຕອນແບ່ງຊາຍແດນນັ້ນລາວໄດ້ເຂົ້າຮ່ວມ, ດຽວນີ້ລາວເປັນເຈົ້າເລົ່າຢູ່ລະອານ, ອາອື່ງກໍໄປວັດແທກກັບເພິ່ນ, ແລ້ວຈຸນີ້ ເຂົາກໍ່ເອີ້ນຈຸນີ້ໄປເປັນພະຍານຫຼັກຖານຮອດເທົ່າທຸກວັນນີ້. ແຕ່ວ່າສຸດທ້າຍ ເພິ່ນກໍ່ບໍ່ໄດ້ມີຜົນງານຫຍັງ, ບໍ່ມີການສືບຂ່າວຫາວຫາເຖິງພວກອາອື່ງເລີຍ. ອັນທີ່ເພິ່ນເອົາຄັ້ງທີໜຶ່ງນັ້ນ, ກໍມີແຕ່ລຸງໄກສອນເວົ້າຜູ້ດຽວໄປ ຄັນລຸງໄກສອນນັ້ນຫາກເພິ່ນຍັງມີຊີວິດຢູ່ ກໍ່ຊິໄດ້ຄືນຢູ່ແຕ່ກໍ່ຊິໄດ້ບໍ່ໝົດ ເວລານັ້ນ ຄືນທີ່ເປັນພື້ນຖານເຮົາລາຍງານລຽນຕິດ, ເພາະວ່າຄືນພື້ນຖານເຮົາ ກໍແມ່ນກອງບັນຊາການຄືກັນ ຊຶ່ງເວລານັ້ນອ້າຍອິນກອງ ລາວເປັນພັນໂທລາວກໍ່ຢູ່ກອງບັນຊາການຫັ້ນ.

ອາອື່ງໄປເຮັດວຽກຢູ່ຊາຍແດນແລ້ວມາບໍ່ທັນ ອາອື່ງມານຳລົດຫັ້ນຊ້າແຕ່ວ່າລາຍງານໃໝ່ ຊິເປັນຫຍັງເຮັດໃໝ່ໄດ້ 3–4 ເທື່ອແລ້ວ, ກໍ່ມີຫຼາຍຄົນທີ່ເປັນພິຍານ, ໃຜຊິບໍ່ຮູ້ ນັບແຕ່ເຈົ້າແຂວງລົງມາ ຕອນອ້າຍບຸນຍັງເປັນເຈົ້າແຂວງ ກໍ່ລາຍງານໄປຈັກເທົ່າໃດເທື່ອແລ້ວຄັນຊິເວົ້າ ຮູ້ໝົດຮອດສູນກາງພຸ້ນ. ແນວນັ້ນລະເລື່ອງການສູ້ຊົນເພື່ອພາລະກິດປະຕິວັດຂອງພວກອາອື່ງ ຄັນຊິເວົ້າອາອື່ງກັບນ້ອງເພິ່ນ ຄຳຊາຍຫັ້ນ ເຂົາມາສຳພາດລຽນຕິດ. ຄຳຊາຍນີ້ມັນຍິງຍິນ ບໍ່ແມ່ນວ່າອາອື່ງເວົ້າຄຸຍຕໍ່ລູກຄຸຍຕໍ່ຫຼານ, ຍິງສອງລຳໃນມື້ດຽວ. ອາອື່ງຢາກເວົ້າສັ້ນໆແນວນີ້ ຕອນມັນຍິງຍົນຕົກ 2 ລຳນັ້ນ ໜຶ່ງລຳຕົກຢູ່ບ້ານກະນົນນີ້ ຍົນອາຍພົ່ນ F105[20]. ອັນນັ້ນແລ້ວ ຍົນລົງຕ່ຳ ມັນສັກລົງມາສອງຄັນ, ເຂົາປົບໝົດ ໝູ່ຄູ່ປົບໝົດ ຄຳຊາຍຫັ້ນວ່າມັນຫັ້ນຕາຍກໍ່ຕາຍ, ເຫັນມາແຕ່ພຸ້ນກໍ່ຍິງໂລດ, ລູກໄຟມັນຍິງຫັ້ນ ກໍ່ສູນໂລດຍົນໃໝ້ເຫັນແສງໄຟລາມ ນຳຍົນຕົກຢູ່ກະນິນຫັ້ນລຳໜຶ່ງ, ອີກລຳທີສອງ ຕົກຢູ່ກະປາຍພຸ້ນ ໃນມື້ດຽວຫັ້ນແລ້ວສ່ວນວັນທີເດືອນປີ ແມ່ນບໍ່ຈື່. ຄືຊິແມ່ນກ່ອນບັ້ນຮົບລຳເຊິນ ປີ 1968–1969. ນັ້ນແລ້ວ ອາອື່ງກໍບໍ່ໄດ້ນັບ, ບາດໄປລາຍງານຕົວຈິງພັດແມ່ນຜູ້ອື່ນ, ໜ້າທີ່ໄປ

---

20 ລຸງຄຳສາຍແມ່ນນ້ອງຊາຍຄີງຂອງລຸງອາອື່ງ ໄດ້ຍິງຍົນອາຍພົ່ນອາເມລິກາຕົກ 2 ລຳມື້ດຽວ, ແຕ່ສຸດທ້າຍ ບໍ່ໄດ້ຜົນຫຍັງຈົນຮອດດຽວນີ້.

ລາຍງານຕ້ອງແມ່ນຄໍາຊາຍ. ອາອຶ່ງເວົ້າວ່າ: ຂອງວ່າເຂົາມີພັກພວກ ເຂົາກໍ່ໃຫ້ຄົນເຂົາສາ ເຂົາເວົ້າເອົາຊື່ໆ ອາອຶ່ງເວົ້າວ່າ ແຕ່ກີ້ທັ້ນເຂົາເວົ້າວ່າບໍ່ໃຫ້ຫຼິ້ນພັກຫຼິ້ນພວກ ຕອນບໍ່ທັນໄດ້ປົດປ່ອຍ ໂອ! ບໍ່ໄດ້ເປັນຄືແນວນີ້, ບາດສະໄໝນີ້ຫຼິ້ນພັກພວກ, ຄັນບໍ່ມີພັກພວກກໍ່ຖືວ່າບໍ່ມີຫຍັງ ຢ່າອາອຶ່ງເວົ້າວ່າ: ນີ້ບໍ່ໄດ້ກໍ່ຢ່າ ບໍ່ໄດ້ວິນວາຍແລ້ວ.

ອາອຶ່ງເວົ້າວ່າ: "ເລື່ອງຄວາມຮູ້ສຶກນີ້, ເວົ້າລວມແລ້ວຄັນວຽກແນວອື່ນເພິ່ນກະບໍ່ວ່າ ຂອງຂ້ອຍບໍ່ມີຄວາມຫອກຄວາມຮູ້ອີ່ສັງປົງໃຈໄດ້, ອັນວຽກປະຕິວັດນີ້ຕີ່ ຄັນຊິເວົ້າລາວເຮັດມາໄດ້ເຄິ່ງຊີວິດຂອງລາວກະບໍ່ມີອີ່ຫຍັງຈັກດີ້ ອາອຶ່ງວ່າ ພວກຫວຽດເຂົາບໍ່ໄດ້ປະກັນ, ຄັນພັກລັດປະແລ້ວ ກໍ່ແລ້ວດອກ ຊິຂັດຂ້ອງນໍາແຕ່ພັກລັດກະບໍ່ແມ່ນແລ້ວ. ຄັນເຮົາຂັດຂ້ອງເພິ່ນກໍ່ບໍ່ຕ່າງຫຍັງກັບເຮົາຂັດຂ້ອງຕໍ່ພໍ່ແມ່ເຮົານີ້ລະ ເຮົາມີແຕ່ໜ້າທີ່ປະຕິບັດເທົ່ານັ້ນ, ໂຕນີ້ລະຂ້ອຍບໍ່ໄດ້ປະເລີຍ, ໄດ້ກິນ ບໍ່ໄດ້ກິນບໍ່ເວົ້າ, ເລື່ອງເສຍທັ້ນເສຍນີ້ ແມ່ນເສຍເງິນດອກເງິນເດືອນບໍ່ມີ ອັດຕອກອັດຕາບໍ່ມີ ຄັນຈຸ້ມມາຖາມເທື່ອລະ 5,000 ກີບ-10,000 ກີບ ອາອຶ່ງໃຫ້ທຸກເທື່ອ, ເພິ່ນເວົ້າແນວໃດ ຂ້ອຍ ກໍ່ບໍ່ໄດ້ປະການປະຕິວັດນີ້. ຄັນຊິເວົ້າວ່າເພິ່ນນີ້ເຮັດນໍາການປະຕິວັດສຸດ ຫຼືບໍ່ສຸດ ກໍ່ຄືເຫັນນີ້ລະຈິນວ່າເຖົ້າສໍ່ານີ້ແລ້ວ", ຄັນຢູ່ແຂວງເພິ່ນມາເອີ້ນອາອຶ່ງກໍ່ໄປ, ເອີ້ນອາອຶ່ງໄປໃສກໍ່ໄປໝົດ ບໍ່ໄດ້ຂັດຂ້ອງ. ມີແຕ່ຂັດຕໍ່ເລື່ອງທີ່ມາຖາມເພິ່ນແນວນີ້ລະ, ຖາມ ໄປແລ້ວ ກໍບໍ່ເຮັດຫຍັງ ເພິ່ນດ່າ. ບາດເຈົ້າເມືອງມາຖາມອາອຶ່ງວ່າ: ຖາມເຮັດ ຫຍັງແບບນີ້? ເຈົ້າເມືອງກໍ່ວ່າໃຫ້ຮອດສູນກາງ ແຕ່ເພິ່ນກໍບໍ່ສົນ. ກ່ອນໜ້ານີ້ ໄດ້ມີຈຸໜຶ່ງຂີ່ລົດມາຈອດຢູ່ຂ້າງບ້ານນີ້, ມາແລ້ວກໍ່ຖາມຫາຜົນງານວ່າ ຊັ້ນຜົນງານທ່າອີ່ສັງເພິ່ນວ່າ, ມາແຕ່ກະຊວງຫຼືບໍ່ກະຊວງກໍ່ຢ່າມັນ, ໂທດກໍ່ໃຫ້ເປັນໂທດການປະຕິວັດພຸ້ນ. ອາອຶ່ງເວົ້າວ່າ ເຮັດຫຍັງກໍ່ສຸດກົກສຸດປາຍ; ໃຜກໍ່ມາຖາມຫາແຕ່ຜົນງານ, ມາເອີ້ນໄປໃສ ກໍ່ເຮັດໃຫ້ອາອຶ່ງທຸກນໍາລ້າໆ, ເຄີກວຽກເຄີກງານ ຍ່າງແຕ່ບ້ານພີ້ໄປຫາບ້ານພຸ້ນຜ່ານມາທໍ່ໃດເຈົ້າວ່າ. ອາອຶ່ງເວົ້າວ່າ: ເຫັນມາຖາມເລື່ອງນີ້ຕັ້ງ 2-3 ເທື່ອແລ້ວກໍຍັງບໍ່ທັນມີຫຍັງຕອບແທນ.

ແມ່ນກະທັ້ງວ່າທາງນະໂຍບາຍຂອງສູນກາງລົງມາ ກໍຍັງບໍ່ທັນໄດ້ຕອບແທນຫຍັງໝົດ. ໃຜມາກໍ່ວ່າມາແຕ່ກະຊວງໝົດ, ຈັກກະຊວງຫຍັງຕໍ່ກະຊວງຫຍັງມາກໍໃຫ້ເລົ່າແຕ່ຄວາມເກົ່າ.

ເຖົ້າແກ່ກໍ່ມີແຕ່ໃຫ້ເຮັດໄຮ່ເຮັດສວນ ບາດຖາງສວນສູ່ມື້ນີ້ອາອື່ງ ເຮັດເອງກັບເມຍ ລູກເຂົາກໍ່ຖາງຕ່າງຫາກ, ອາອື່ງກໍ່ເຮັດພໍຜືນໜຶ່ງ ໝົດເຂົ້າປະມານ 3-4 ບຸງນີ້ແລະ, ແຕ່ລະປີກໍພໍກຸ້ມຢູ່ກຸ້ມກິນບໍ່ໄດ້ຂາຍດອກ ພໍກິນພໍຢູ່ໃນຄອບຄົວຫັ້ນແລະ. ບາງເທື່ອປີໜ້າອາດຈະອຶດແລ້ວ ເສຍຫຍ້າບໍ່ແຕກ ຂອງເຮັດແຕ່ສອງເຖົ້ານີ້, ເກັບກ່ຽວກໍ່ເກັບກ່ຽວສອງເຖົ້ານີ້. ດຽວນີ້ງົວຄວາຍກໍ່ບໍ່ມີດອກ, ມີແຕ່ງົວ 2 ໂຕ ແຕ່ກີ້ງົວອາອື່ງຫຼາຍ ເອົາໃຫ້ຄົນລ້ຽງ ມັນຕາຍໝົດບາດນີ້ອາອື່ງໃຫ້ລູກລ້ຽງໝົດ, ບາດມັນໄດ້ລູກມາແລ້ວປັນກັນ.

ອາອື່ງກະເອົາອອກມາໃຫ້ເບິ່ງ, ເພິ່ນວ່າໃຫ້ເບິ່ງເອົາເອງ! ເພິ່ນເບິ່ງກໍ່ບໍ່ຈື່ແລ້ວ, ປະໄວ້ເພື່ອເບິ່ງຫຼຽນໄຊນີ້ວ່າ ອາອື່ງຊິຂາຍກໍບໍ່ໄດ້ຂາຍດອກ ເອົາໄປໂລດຂອງທຳມະດາຊື່ໆ ອາອື່ງເວົ້າ, ບໍ່ມີປະໂຫຍດຢັ້ງຢືນຜົນງານ ອາອື່ງຫຸບເອົາມາໃຫ້ເຂົາເບິ່ງ ຊຶ່ງໃນນັ້ນມີຫຼຽນໄຊອິດສະຫຼະ ຊັ້ນ 2 ປີ 1981, ປີທີ່ທ່ານອິນກອງເປັນເຈົ້າເມືອງ. ຫຼຽນໄຊຫັ້ນມີລາຍເຊັນຂອງເຈົ້າສົມເດັດສຸພານຸວົງຕິດໄວ້ຢູ່ຫັ້ນ ແຕ່ມັນຂາດອັນນີ້ແລ້ວອາອື່ງເອົາຖິ້ມ, ເອົາໄປຍື່ນຂໍເຂົາແລ້ວເຂົາບໍ່ໃຫ້, ສ່ວນຫຼຽນກາໜ່ວຍໜຶ່ງກໍ່ໄດ້ປີ 1968 ແລະ ປີປົດປ່ອຍນີ້ກໍໄດ້ກາແຮງງານອັນໜຶ່ງ. ອີກຊຸມໜ່ວຍອື່ນໆໄດ້ປະມານປີ 92 ນີ້ໝົດ, ພວກອາອື່ງກໍ່ໄດ້ ຫຼາຍຢູ່ເມືອງເຮົານີ້ລະ ລຸ້ນນັ້ນ ແລ້ວລຸ້ນປີ 92 ຫັ້ນແລ້ວໃບຍ້ອງຍໍ 10 ກວ່າໃບພຸ້ນ ມັນແມ່ນເຈ້ຍທຳມະດາຊື່ໆ ໃນນັ້ນມີຂັ້ນສູນກາງໄດ້ 4 ໃບ, ຂັ້ນແຂວງໄດ້ 3 ໃບ, ສ່ວນຂັ້ນເມືອງ ແລະທາງກອງບັນຊາການບັ້ນຮົບລຳເຊີນກໍ່ບໍ່ມີການຍ້ອງຍໍເລີຍ.

ອາອື່ງວ່າ: ສຳຄັນບໍ່ສຳຄັນຫັ້ນເອົາໃຫ້ຫວຽດນາມອ່ານເບິ່ງ. ມັນເວົ້າວ່າຄັນຢູ່ເມືອງຂ້ອຍ ເງິນເດືອນຕ້ອງໄດ້ເດືອນໜຶ່ງ ສາມລ້ານ ສໍ່າເຈົ້ານີ້ໃດບໍ່ເຮັດຫຍັງກໍ່ໄດ້ມັນວ່າ ຕັດຄໍກໍໄດ້. ບໍ່ເຮັດຫຍັງດອກ ພໍ່ເອີຍເຂົາເວົ້າຫັ້ນ.

ມີບໍ່ມີກໍ່ຢູ່ໃນເຮືອນຫັ້ນຍັງກໍ່ບໍ່ຮູ້ຈັກແລ້ວ. ບາງອັນເປັນເອກກະສານ, ບາງອັນເປັນລາຍເຊັນ, ອາອຶ່ງນີ້ ເບິ່ງຄັກແນ່. ໄປຍື່ນເຮັດຫຍັງ ເຂົາບໍ່ໄດ້ເອົາບັນສອກບັນຊີຫຍັງໄປຍື່ນ. ກໍສຳພາດອັນນີ້ລະ, ສຳພາດຜົນງານຂອງອ້າຍອາອຶ່ງ ແລະກໍ່ສຳພາດຜົນງານຂອງອາອຶ່ງພ້ອມ, ຈຸນາກ່ອນກໍ່ຄືກັນ, ເຂົາສຳພາດວຽກອາອຶ່ງ, ມາສຳພາດວຽກລວມແດ່, ທ່ານອິນກອງເປັນເຈົ້າແຂວງນີ້ ແມ່ນໄລຍະ 80-81 ນີ້ນະ. ຫຼຽນໄຊນີ້ ໄລຍະປົດປ່ອຍນີ້ບໍ, ຫຼຽນໄຊຫັ້ນ ລາຍເຊັນຂອງສົມເດັດເຈົ້າສຸພານຸວົງ, ກາໝາຍມາຕິດນີ້ມັນຂາດອອກ. ເອົາໄປຍື່ນຂໍແລ້ວເຂົາບໍ່ໃຫ້. ຫຼຽນການີ້ ໄດ້ປະມານຍ່ານ 92 ນີ້ ພວກອາອຶ່ງກໍໄດ້, ຫຼາຍຄົນໃນເມືອງນີ້ລະລຸ້ນນັ້ນລຸ້ນ 92 ຫັ້ນ.

ແມ່ເຖົ້າບຸນຫຼ້າ

ເຜົ່າຕະລຽງ

(ບ້ານໜອງເລົ່າ ເມືອງທ່າແຕງ ແຂວງເຊກອງ)

ດຽວນີ້ເວົ້າເຖິງຊີວິດຂອງແມ່ເຖົ້າບຸນຫຼ້າແຕ່ຍັງນ້ອຍ, ພໍ່ຂອງເພິ່ນຕາຍປະແຕ່ເພິ່ນຍັງນ້ອຍ ເພິ່ນກໍ່ບໍ່ຈື່, ເພິ່ນຍັງແຕ່ອ້າຍເອື້ອຍ ແລະ ແມ່ທີ່ຢູ່ນຳກັນ. ຄັນເວົ້າເລື່ອງຄວາມທຸກຂອງເພິ່ນ ມັນພັນລະນາບໍ່ໝົດແລ້ວ. ຄວາມທຸກຄວາມຍາກຂອງເພິ່ນແມ່ນທຸກແລ້ວຂາດເຂີນ,ເຂົ້ານ້ຳກິນກໍ່ບໍ່ກຸ້ມ, ເພິ່ນກິນແຕ່ສາລີ, ເຂົ້າກາງຽນ, ມັນຕົ້ນ, ມັນດ້າງ, ມັນເຜືອກ, ອັນນັ້ນແລ້ວເປັນອາຫານເຂົ້າ, ຄືເພິ່ນເວົ້າເມື່ອກ່ອນຫັ້ນແລ້ວພໍ່ເພິ່ນໄດ້ເມຍສອງ,ລູກເມຍກົກພໍ່ເພິ່ນໄດ້ສອງຄົນ ,ແມ່ກົກເພິ່ນຕາຍຈຶ່ງວ່າ ພໍ່ເພິ່ນມາໄດ້ແມ່ເພິ່ນອີກ. ມີແຕ່ແມ່ເພິ່ນລ້ຽງ, ເພິ່ນທຸກອີ່ຫຼີ, ແຕ່ເພິ່ນຢູ່ນຳກັນກັບອ້າຍ 2–3 ຄົນ, ໄປໃສກໍ່ໄປນຳກັນ. ເຂົາໃຫຍ່ແລ້ວເຂົາກໍ່ເອົາລູກເອົາເມຍ. ແລ້ວເຂົາກໍ່ເຮັດກິນຕ່າງຫາກ, ແຕ່ວ່າ ພວກເພິ່ນຢູ່ນຳກັນ. ແຕ່ກີ້ເພິ່ນຢູ່ນຳກັບແມ່ລູກສາມສີ່ຄົນ, ກິນນຳກັນກັບແມ່ລ້ຽງເພິ່ນ. ພວກເພິ່ນເຮັດໄຮ່ແລ້ວ, ບໍ່ໄດ້ເຮັດນາຢູ່ເມືອງດັກຈຶງ. ເວລາເຮັດໄຮ່ຫັ້ນເພິ່ນກໍ່ເຮັດຫຼາຍຢູ່ ເທົ່າທີ່ວ່າເພິ່ນມີຄວາມສາມາດຫັ້ນ, ແຕ່ວ່າລາຍຮັບຫັ້ນ ບໍ່ໄດ້ຕາມຄວາມເໝາະສົມ. ເພິ່ນວ່າຫັ້ນແລ້ວຈຶ່ງວ່າທຸກຍາກ, ເກືອຊິກິນກໍ່ບໍ່ມີເອົາຜັກກາດຫັ້ນແລ້ວກິນຕາງເກືອ, ເອົາອີ່ຍົກຫັ້ນແລ້ວຕົ້ມກິນຕາງເກືອ, ການນຸ່ງການຖືກໍ່ບໍ່ມີ. ແມ່ເຖົ້າບຸນຫຼ້ານີ້ ແຕ່ກ່ອນເຮັດການປະຕິວັດ ມີສິ້ນແຕ່ຜືນດຽວ, ແລະກໍ່ມີແພຂາດບົ້ງນ້ອຍໆປົກຫຼັງ ເພິ່ນໄປເຮັດໄຮ່ເຮັດສວນ, ໄປເຈ່ຍຟືນ, ເຈ່ຍມັນ, ເຈ່ຍເຜືອກ. ສິ້ນເພິ່ນກໍ່ບໍ່ມີ ເສື້ອເພິ່ນກໍ່ບໍ່ມີຫັ້ນແລ້ວ ເພິ່ນວ່າຄວາມທຸກຄວາມຍາກອີ່ຫຼີ. ບາດໃຫຍ່ມາຄັນຊິເວົ້າເລື່ອງ ຄວາມສາມັກຄີຫັ້ນແມ່ເຖົ້າບຸນຫຼ້ານັ້ນຮູ້ແຕ່ນ້ອຍ. ເປັນຫຍັງເພິ່ນຈຶ່ງຮູ້ຍ້ອນວ່າເພິ່ນເອງທຸກ ຈຶ່ງມີຄວາມຄິດດີແນວນີ້; ເພິ່ນຮູ້ສາມັກຄີກັບໝູ່ ໄປເຮືອນນີ້ ໄປເຮືອນນັ້ນ, ຫຼືວ່າໝູ່ເພິ່ນ ໄປເຮືອນເພິ່ນ, ເພິ່ນຢາກໃຫ້ໝູ່ຊ່ວຍໂຕເອງນັ້ນ ຕາມແນວຄິດຂອງ

ເພິ່ນແນວນັ້ນຫັ້ນ, ຈຶ່ງວ່າເພິ່ນມັກສາມັກຄີກັບໝູ່. ເວລາໝູ່ເພິ່ນເຮັດວຽກເຮັດງານເສຍຫຍ້າໄຮ່ຮື້ໄຮ່ ເພິ່ນກໍ່ໄປຊ່ວຍປ້າຊ່ວຍລຸງເພິ່ນ. ປ້າ, ອາວອາອ້ອມຂ້າງເພິ່ນ, ພີ່ນ້ອງເພິ່ນເອງຫັ້ນແລ້ວ. ເລື່ອງເຮັດວຽກເຮັດງານເພິ່ນຮູ້ຈັກເຮັດແຕ່ເພິ່ນຍັງນ້ອຍພຸ້ນ, ບໍ່ແມ່ນວ່າເພິ່ນຢາກຍ້ອງໂຕເອງດອກ. ການເຮັດຂອງເພິ່ນຫັ້ນ ຍ້ອນເພິ່ນຫັ້ນວ່າໂຕເອງທຸກ, ສອງມາກໍ່ຍ້ອນເພິ່ນຫັ້ນວ່າໂຕເອງເປັນຄົນຂີ້ລ້າຍ. ເພິ່ນຄິດວ່າໂຕເອງ ຂີ້ລ້າຍທັງຂີ້ຄ້ານຢ້ານໝູ່ເວົ້າຂ້ອນ, ຢ້ານໝູ່ດູຖູກຫັ້ນແລ້ວ. ເພິ່ນຄິດວ່າໂຕເອງແຮ່ງທຸກ ແຮ່ງບໍ່ເຮັດ, ແຮ່ງມີແຕ່ຢາກກິນເພິ່ນຢ້ານໝູ່ເວົ້າແນວນັ້ນ. ຄັນວ່າໄປບຸນ ໄປສິນ ບ້ານນີ້ບ້ານນັ້ນ ເພິ່ນຕ້ອງເຮັດວຽກຊ່ວຍເຂົາໝົດຄວາມສາມາດຂອງຕົນເອງ, ຕອນແລງ ເພິ່ນຈຶ່ງເມືອ, ບໍ່ໄດ້ເຄີຍນອນ, ເວລາໄປຫຼິ້ນບຸນ ເພິ່ນບໍ່ໄດ້ນອນ ເວລາໃຫຍ່ມາລະແມ່ນວ່າເພິ່ນບໍ່ທັນຮູ້ຈັກລົມບ່າວຊູ້ຳໜາ. ໄລຍະນັ້ນພໍ່ເພິ່ນເສຍ ແຕ່ເພິ່ນຍັງນ້ອຍ, ເພິ່ນເອງບໍ່ຈື່. ແຕ່ກີ້ບໍ່ມີເກືອກິນ ເຂົ້າກິນມີແຕ່ອີ່ຍິກຕາງເກືອ ນ້ຳດັ່ງຕາມເກືອ, ຫຼືນ້ຳຜັກກາດຕົ້ມຂຽວກິນຕາງເກືອ. ແມ່ເພິ່ນເວົ້າໃຫ້ຟັງ ນີ້ເພິ່ນກໍ່ບໍ່ຈື່ວ່າແມ່ເພິ່ນເສຍປີໃດ. ໄລຍະແມ່ເພິ່ນເສຍຫັ້ນເພິ່ນເອງກໍ່ໃຫຍ່ແລ້ວ, ເຂົ້າເຮັດການປະຕິວັດແລ້ວ ຕອນແມ່ເພິ່ນເສຍຫັ້ນ, ເພິ່ນເຄື່ອນໄຫວຢູ່ນຳຕາແສງ ຢູ່ເມືອງດັກຈຶງພຸ້ນ.

ບາດນີ້ໄລຍະແມ່ເຖົ້າບຸນຫຼ້າ ອາຍຸ 10 ປີແລ້ວ ເພິ່ນກໍ່ຮູ້ຊ່ວຍພໍ່ແມ່ ແລະ ເວລານັ້ນ ຄວາມຮັກລະຫວ່າງແມ່ເພິ່ນກັບເພິ່ນກໍ່ຮັກທີ່ສຸດຫັ້ນແລ້ວ. ແມ່ເພິ່ນຮັກເພິ່ນ, ແມ່ເພິ່ນບອກສອນ ເລື່ອງວຽກເລື່ອງງານ, ເລື່ອງເຮັດວຽກເຮັດງານຫຼືວ່າຫາຢູ່ຫາກິນ, ຄວາມຮັກແມ່ຂອງເພິ່ນຈົນເວລາເພິ່ນຕາຍກໍ່ຕາຍຢູ່ໃນຕັກຂອງເພິ່ນນີ້. ແມ່ເຖົ້າບຸນຫຼ້າມາແຕ່ເຮັດວຽກກາງຄືນ, ເວລາແມ່ເພິ່ນຕາຍກໍ່ຕາຍຢູ່ໃນຕັກຂອງເພິ່ນນີ້, ຈົນເທິງແລ້ວ ພວກອ້າຍຂອງເພິ່ນບອກເພິ່ນ ປະໜາ! ປະໜາ! ເພິ່ນກໍ່ວ່າ ບໍ່ໜາຈັກໜ່ອຍແມ່ເພິ່ນຊິຄືນ.

ເວລາເພິ່ນຍັງນ້ອຍແມ່ເພິ່ນບອກແລ, ແມ່ເພິ່ນວ່າແນວນີ້, "ລູກເອີຍເຮົາເປັນຄົນກຳພ້າກຳພອຍບໍ່ມີພໍ່ບໍ່ມີແມ່, ພວກລູກຕ້ອງຫາກິນກຸ້ມຕົນເອງ,

ເຮັດວຽກເຮັດງານຢ່າສູ່ອີງໃສ່ໝູ່, ຢ່າສູ່ອາໄສໝູ່, ຢ່າສູ່ຂໍນຳໝູ່, ຢ່າສູ່ໄປລັກໄປສິກ, ໄປກິນເຂົ້າກິນນ້ຳເຮືອນຜູ້ອື່ນ, ຢ່າສູ່ເຮັດແນວນັ້ນ". ແຕ່ວ່າເພິ່ນລັກເທື່ອໜຶ່ງຕອນໄປນຳໝູ່ ນາງອັນນັ້ນຄືນເຕ້ຍໆຢູ່ບ້ານກາກອກນີ້. ເພິ່ນລັກເອົາໝາກປັດ, ແລ້ວກໍ່ປັນໃຫ້ກັນແລ້ວເພິ່ນກໍ່ເອົາມາຫ້ອຍໃສ່ຄໍ, ຕອນແລງແມ່ເພິ່ນກໍ່ເຫັນ, ແມ່ເພິ່ນກໍ່ມາຕີເພິ່ນວ່າບໍ່ເຮັດແນວນີ້ເດີ, ບ້ານເມືອງຊິເວົ້າໃຫ້, ເພິ່ນຊິວິພາກວິຈານຄົນຂີ້ລັກຄົນບໍ່ດີ, ແມ່ເຖົ້າບຸນຫຼ້າ ກໍ່ໄປສົ່ງຄືນແລ້ວ, ທັງໄຫ້ທັງແມ່ເພິ່ນຕີເພິ່ນ ແຕ່ນັ້ນມາເພິ່ນຫຼາບເລີຍ, ແມ່ເພິ່ນບອກເລື້ອຍໆລູກເອີຍ: ຢູ່ດີກິນດີ, ຢູ່ໃສກໍ່ດີ ຄືໄລຍະທີ່ແມ່ເຖົ້າບຸນຫຼ້າບໍ່ທັນອອກເຮັດການປະຕິວັດ, ເວລານັ້ນ ສັດຕູກໍ່ມາເຄື່ອນໄຫວທາງນັ້ນ, ແມ່ເພິ່ນເຫັນພວກສັດຕູ, ແລະແມ່ເພິ່ນເຫັນພວກປະຕິວັດແມ່ເພິ່ນບອກວ່າ: "ລູກເອີຍເຈົ້າຢາກອອກເຮັດວຽກເຮັດງານກໍ່ເຮັດ, ຢາກໄປກໍ່ໄປແມ່ເພິ່ນເວົ້າ, ແມ່ນີ້ເຮັດວຽກເຮັດງານຢູ່ເຮືອນຜູ້ດຽວກໍ່ກຸ້ມຢູ່ດອກ, ບໍ່ຕ້ອງອີງຜູ້ອື່ນ. ໃຫ້ລູກໄປສາ, ເວລາແມ່ບໍ່ຢູ່ເຈົ້າໃດຊິເບິ່ງ". ສໍ່ານີ້ ແລ້ວແມ່ເພິ່ນຮັກເພິ່ນ. ບໍ່ມີໃຜເບິ່ງເຈົ້າແມ່ເພິ່ນວ່າ: ອ້າຍກໍ່ມີເມຍໝົດແລ້ວ, ເອື້ອຍກໍ່ເອົາຜົວໄປ ຢູ່ເຮືອນຜູ້ອື່ນແລ້ວ.

ບາດເຮັດໄຮ່ເຮັດສວນຖາງປ່າທັນແລ້ວແລະທຳອິດເພິ່ນກໍ່ຖາງປ່າເຮັດໄຮ່, ເພິ່ນບັກໄມ້ເຄີຍເຮັດຢູ່ດອກ. ປີນີ້ເພິ່ນ ເສຍໄຮ່ໃໝ່, ບາດປີໜ້າເພິ່ນເສຍຫຍ້າໄຮ່ຫຼືກປູກເຂົ້າ, ປີໜ້າອີກກໍ່ຍັງປູກເຂົ້າ, ປີຕໍ່ໄປເພິ່ນກໍ່ຍັງປູກມັນຕົ້ນອີກຢູ່ທັ້ນ, ປູກມັນດ້າງ 2-3 ປີ. ເພິ່ນເຮັດກໍ່ບໍ່ກຸ້ມ ກິນເຂົ້າທັ້ນເຮັດກໍ່ຍັງໄດ້ຂໍນຳພີ່ນ້ອງ. ເພິ່ນໄປບ້ານອື່ນແລ້ວ. ຍາມສາລີເພິ່ນ ໄປຂໍນຳບ້ານອື່ນ, ເພິ່ນໄປຮັບຈ້າງເສຍຫຍ້າໃຫ້ເຂົາຫຼືວ່າຕັດຟືນໃຫ້ເຂົາ, ເຮັດແນວນັ້ນເຂົາຈຶ່ງເອົາເຂົ້າໃຫ້ເພິ່ນມາກິນ. ເວລານັ້ນຢູ່ເຮືອນແມ່ເຖົ້າບຸນຫຼ້າ ມີ 6 ຄົນ, ນ້ອງນຸ່ງເພິ່ນກໍ່ຊອກມາໂຮມກັນ,ຜູ້ນີ້ຊອກຜູ້ນັ້ນກໍ່ຊອກ, ຜູ້ນີ້ໄປທາງນີ້ຜູ້ ນັ້ນໄປທາງນັ້ນ, 2 ຄົນຢູ່ເຮືອນ ປີໃດພວກເພິ່ນກໍ່ເຮັດແນວນັ້ນ ແລະພວກ ເພິ່ນເຮັດຕັ້ງແຕ່ໃດມາ.

ຢູ່ເຮືອນແມ່ເຖົ້າບຸນຫຼ້າງົວຄວາຍບໍ່ມີ, ມີແຕ່ໝູໄກ່, ຄັນມີກໍ່ມີຄວາຍໂຕໜຶ່ງ ບໍ່ແມ່ນເພິ່ນຊິລ້ຽງຂາຍ, ເພິ່ນລ້ຽງໄວ້ພໍແຕ່ເວລາມີຮີດມີຄອງ, ຫຼືວ່າມີເຈັບມີເປັນ,ສະນັ້ນແລ້ວເພິ່ນແຮໄວ້ 2ໂຕ ປານນັ້ນແລ້ວ, ບໍ່ໄດ້ຂາຍ, ທຸກກໍ່ຢ່າບໍ່ໄດ້ຂາຍ. ແມ່ຂອງແມ່ເຖົ້າບຸນຫຼ້ານີ້ ຮູ້ຕໍ່າຫູກຕໍ່າແພ, ແມ່ເພິ່ນຕໍ່າຫູກຕໍ່າແພກັບເອື້ອຍເພິ່ນຫັ້ນຕໍ່າເປັນ. ການຕໍ່າຫູກຕໍ່າແພເວລານັ້ນ ບໍ່ແມ່ນວ່າມີຝ້າຍ, ເຂົາເອົາ ປ່ານມາຕໍ່າ, ປ່ານໃນບ້ານຫັ້ນແລ້ວ, ເຂົາປູກເອົາເອງ, ຝ້າຍບໍ່ໄດ້ປູກ, ແຕ່ມັນພັດໝັ້ນ,ໄດ້ຮອດ 2-3 ປີພຸ້ນ. ວິທີພວກເພິ່ນເຮັດຕັດແລ້ວກໍ່ປາດເປືອກມັນຖິ້ມ, ແລ້ວພວກເພິ່ນບິບຄັ້ນແລ້ວ ຈຶ່ງຕົ້ມເອົາຂີ້ເຖົ່າ, ຕົ້ມແລ້ວຈຶ່ງໄປຕີບ(ຊັກ), ມາຕາກແຫ້ງແລ້ວກໍ່ຄົ້ນ, ຈຶ່ງຕໍ່າໄດ້ຍ້ອມຕາກແດດແຫ້ງແລ້ວນຸ່ງໂລດ.

ປີໜຶ່ງແມ່ນເພິ່ນສາມາດເຮັດແພໃຫ້ລູກໃຫ້ຫຼານຄັນມີປ່ານຫັ້ນແຕ່ມັນບໍ່ມີຝ້າຍ ມີແຕ່ປ່ານຄາວນັ້ນ, ຄັນມີມັນກໍ່ກຸ້ມຫັ້ນແລ້ວມັນຊິຍາກອີ່ສັງ, ເພາະວ່າແມ່ເພິ່ນຕໍ່າ ສອງສາມມື້ກໍ່ແລ້ວເປັນຜືນແພເລີຍ, ເປັນສິ້ນເລີຍ. ເຮັດແລ້ວ ແມ່ເພິ່ນບໍ່ໄດ້ຄ້າໄດ້ຂາຍ, ມີແຕ່ນຸ່ງຫົ່ມເທົ່ານັ້ນ. ແມ່ເພິ່ນສອນຕໍ່າຫູກຕໍ່າແພ ແລະແມ່ເຖົ້າບຸນຫຼ້າກໍ່ເປັນແຕ່ກ່ອນ. ເວລາຢູ່ທາງການ, ເວລາຢູ່ແຂວງຕາເວັນອອກຫັ້ນເພິ່ນກໍ່ໄດ້ຕໍ່າແພອາບນ້ຳ, ເພິ່ນຕໍ່າເປັນແລ້ວກຸ້ມຕົນເອງໄດ້ແລ້ວ. ໄລຍະເພິ່ນເຮັດວຽກທາງການສະບາຍດອກມີຝ້າຍຂອງລັດແລ້ວ, ຕີແຕ່ຂີ້ຄ້ານຕໍ່າຫັ້ນ, ແມ່ເພິ່ນນີ້ນອກຈາກ ຕໍ່າຫູກຕໍ່າແພແລ້ວ, ແມ່ເພິ່ນຍັງໄດ້ສອນລ້ຽງເປັດລ້ຽງໄກ່, ເກືອເປັດເກືອໄກ່, ເສດຖະກິດ ຄອບຄົວແມ່ເຖົ້າບຸນຫຼ້າ. ແມ່ເພິ່ນແມ່ເຖົ້າບຸນຫຼ້າເພິ່ນເວົ້າແນວນີ້: "ພວກລູກສີ່ຫ້າຄົນນີ້ກໍ່ແບ່ງກັນ, ຜູ້ອ້າຍໃຫ່ຍຫັ້ນ ແມ່ນວ່າໄປເຮັດໄຮ່ຕອນເຊົ້າຕອນແລງຢ່າສູ້ໄປຫຼິ້ນຫຼາຍ, ສ່ວນອ້າຍກາງນີ້ແມ່ນເບິ່ງງົວເບິ່ງຄວາຍ,ສ່ວນວ່າເຈົ້າສອງຄົນນີ້ແມ່ນວ່າຕັກນ້ຳຕຳເຂົ້າຫາຟືນ, ສ່ວນແມ່ເຖົ້າບຸນຫຼ້າເອງ ແມ່ນແຕ່ງກິນແຕ່ງຢູ່". ເພິ່ນແບ່ງແນວນັ້ນ, ແມ່ເຖົ້າບຸນຫຼ້າເຮົາເຮັດຕາມແມ່ເພິ່ນບອກ, ເພາະວ່າ ເພິ່ນເອງເປັນນ້ອງຫຼ້າ.

ພວກອ້າຍພວກເອື້ອຍເພິ່ນກໍ່ຮັກເພິ່ນຫັ້ນແລ້ວ, ເລື່ອງເຮັດວຽກເຮັດງານ ອ້າຍເອື້ອຍເພິ່ນ ບໍ່ເຄີຍຕີເພິ່ນຈັກເທື່ອ, ເຂົາກໍ່ບໍ່ຮ້າຍເພິ່ນ, ແມ່ເພິ່ນກໍ່ບໍ່ຮ້າຍເພິ່ນ. ມີແຕ່ເພິ່ນຮ້າຍເພິ່ນເທື່ອດຽວ ຫັ້ນແລ້ວ ຍ້ອນເພິ່ນຂີ້ລັກ. ແລະເພິ່ນບໍ່ເຄີຍຖຽງຄວາມອ້າຍເອື້ອຍຂອງເພິ່ນ, ເພິ່ນເປັນຄົນບໍ່ມັກປາກ. ດຽວນີ້ແລ້ວເພິ່ນຮ້າຍເດັກນ້ອຍ. ແຕ່ກ່ອນຫັ້ນເພິ່ນບໍ່ໄດ້ຖຽງ ຂອງເຂົາບໍ່ໄດ້ເວົ້າອີ່ຫຍັງໃຫ້ເພິ່ນເດ, ຊິເອົາຫຍັງມາຖຽງເຂົາ. ວຽກແມ່ເຖົ້າບຸນຫຼ້າເຮັດ, ສໍ່າໃດກໍ່ເຮັດ. ບໍ່ມັກຢູ່ເຮືອນ ແຕ່ກ່ອນຫັ້ນ, ເຂົາໃຫ້ເພິ່ນຢູ່ເຮືອນບໍ່ມັກຢູ່ເຮືອນ, ເພິ່ນຢາກໄປນໍາເຂົາ, ຟັງເຂົາປຶກສາກັນຕອນແລງຫັ້ນ ວ່າມື້ອື່ນນີ້ເຂົາຊິໄປທາງໃດ, ຕອນເຊົ້າເພິ່ນໄປລັດເຂົາກ່ອນແລ້ວຢູ່ຫີນທາງພຸ້ນ. ເພິ່ນໄປຕາມທາງຫັ້ນເຂົາໃຫ້ເມືອເພິ່ນກໍ່ບໍ່ເມືອ, ຂອງເພິ່ນຢາກໄປນໍາເຂົາ, ເພິ່ນດຸສໍ່າຄົນທຸກຄົນຍາກຫັ້ນແລ້ວຄືແມ່ລ້ຽງເພິ່ນເວົ້າຫັ້ນແລ້ວ: "ຄັນຊຸມເຈົ້າບໍ່ດຸແມ່ນໃຜຊິລ້ຽງຊຸມເຈົ້າ, ຄັນເຈົ້າບໍ່ເຮັດ ເຈົ້າອຶດເຈົ້າຫິວ, ເຈົ້າລັກຂອງຜູ້ອື່ນເດມັນເສຍປຽບ, ບໍ່ໃຫ້ເຮັດແນວນັ້ນ, ຈັກໜ່ອຍເຂົາວ່າ ແມ່ລ້ຽງຊຸມເຈົ້າບໍ່ກຸ້ມ, ກໍ່ແມ່ນອນແລ້ວບໍ່ກຸ້ມຄັນມີແຕ່ແມ່ເຮັດ. ພວກລູກກໍ່ຕ້ອງເຮັດນໍາຫັ້ນແລ້ວ, ຜູ້ໃຫຍ່ເຮັດຫຼາຍກວ່າ, ຜູ້ນ້ອຍເຮັດໜ້ອຍກວ່າ", ແມ່ເພິ່ນເວົ້າແນວນັ້ນ.ຄັນເວົ້າເລື່ອງແມ່ແມ່ເຖົ້າບຸນຫຼ້າຫັ້ນເພິ່ນບອກກີບອກກີ. ເວລາແມ່ເພິ່ນບອກຫັ້ນ ເພິ່ນຢາກຮ້າຍ, ຂອງວ່າແມ່ເຖົ້າບຸນຫຼ້າເພິ່ນຮູ້ແລ້ວ, ເພິ່ນຄິດໃນໃຈຫັ້ນແຕ່ຄວາມຈິງ ເພິ່ນກໍ່ບໍ່ຮູ້ດອກ.

ແມ່ເຖົ້າບຸນຫຼ້າ ເພິ່ນຮຽນຕໍ່າສິ້ນ, ບາດວ່າສານກະແຕະກະຕ່າແມ່ນເພິ່ນບໍ່ໄດ້ຮຽນ, ເພິ່ນບໍ່ເປັນ, ມີແຕ່ສານສິ້ນສານສາດເພິ່ນເປັນອັນນັ້ນ. ແມ່ເຖົ້າບຸນຫຼ້ານີ້ມັກສ້ອນມັກງົມຫອຍງົມກະປູ ແນວນັ້ນແລະ. ເລື່ອງຫາກິນສັດໂຄກນີ້ ແມ່ນເພິ່ນເປັນ, ເລື່ອງສັດໂຄກເພິ່ນຫາບໍ່ເປັນ, ບາດເອື້ອຍເພິ່ນຫາເປັນໃດຫາກິນແນວນີ້. ພວກອ້າຍເພິ່ນກໍ່ມີແຕ່ລ່າສັດປ່າແລ້ວ, ເຂົາເອົາໜ້າຍິງນົກ ຍິງກະແຕ. ການຫາປາແມ່ນການຫາກິນ ທີ່ພວກເພິ່ນຖືວ່າ ອາຫານການກິນມາແຕ່ ທໍາມະຊາດຫຼາຍກວ່າ. ບາດໄດ້ມາອ້າຍເອື້ອຍນ້ອງເພິ່ນ ກິນນໍາກັນ, ບໍ່ໄດ້ຍາດກັນດອກການຢູ່ ການກິນນີ້, ເພິ່ນເປັນນ້ອງຫຼ້າກໍ່ບໍ່ໄດ້ຍາດ

ໝູ່ດອກ, ອ້າຍເອື້ອຍນ້ອງເຂົາກໍ່ປັນໃຫ້ເພິ່ນກິນຢູ່ດອກ. ແນ່ນອນແລ້ວເຂົາແບ່ງໃຫ້ເພິ່ນຫຼາຍກວ່າໝູ່ເພາະເປັນນ້ອງຫຼ້າເດ. ພວກເພິ່ນປັນກັນແລ້ວແຕ່ລະຄົນໄດ້ຊີ້ນນຶກຊີ້ນໝູມາ, ຜູ້ໃດຮັກແມ່ກໍ່ປັນໃຫ້ແມ່ອີກເວລາກິນເຂົ້າ. ສຸດທ້າຍແລະແມ່ເພິ່ນຫັ້ນໄດ້ຫຼາຍກວ່າໝູ່, ແມ່ເພິ່ນໄດ້ຫຼາຍແລະ, ເພາະວ່າອ້າຍຜູ້ນີ້ເອົາໃຫ້, ເອື້ອຍຜູ້ນີ້ເອົາໃຫ້.

ແພງາມໆແມ່ເຮັດສິ້ນໃຫ້ລູກຫຼ້າ, ໂອຍທີແຕ່ເພິ່ນສອງຄົນແມ່ຍິງກໍ່ໄດ້ໝົດແລ້ວ, ເອື້ອຍເພິ່ນໄດ້ເພິ່ນກໍ່ໄດ້. ບາດພວກອ້າຍເພິ່ນໄດ້ເມຍແລ້ວ, ພີ່ເອື້ອຍຂອງເພິ່ນສອງສາມຄົນ ຄັນມີຝ້າຍ ຄືດຽວນີ້ຫັ້ນບໍ່ອຶດແລະແພ. ເພິ່ນກັບເອື້ອຍເພິ່ນກໍ່ມີແຕ່ໃຫ້ເອື້ອຍຜູ້ໜຶ່ງແລ້ວຕ່ຳ.

ເວລາມີບຸນມີທານດໍໂດຣ ຫຼືບຸນກິນງິ້ວຄວາຍແລະບຸນຕ່າງໆມ່ວນຊື່ນ. ແມ່ເພິ່ນໃຫ້ເພິ່ນໄປ ແຕ່ແມ່ເພິ່ນບໍ່ໃຫ້ເພິ່ນນອນແຮມຄືນ, ຕອນແລງແລ້ວໃຫ້ເພິ່ນເມືອ, ຄັນມີໝູ່ຜູ້ໃດເມືອພ້ອມເພິ່ນ. ພວກເດັກນ້ອຍແມ່ເພິ່ນບໍ່ໃຫ້ນອນທົ່ວທິບທົ່ວແດນ, ເພາະແຕ່ກ່ອນມັນມີໝໍມົນ ເຮັດໝໍມົນທົດລອງຂອງເຂົາມີຢຸກມີຢາ, ມີຫວ້ານກ້ານກາ ມີຢາກ້ານກໍາຫັ້ນ. ແມ່ເຖົ້າບຸນຫຼ້າຢ້ານຖືກຫວ້ານຖືກຢາ, ໝູ່ໃສ່ທົດລອງແນວນັ້ນ. ເຫຼົ້າຢາແຕ່ກີ້ ປ້າບຸນຫຼ້າກໍ່ບໍ່ໄດ້ກິນນໍາໝູ່, ຟ້ອນເພິ່ນກໍ່ມັກຟ້ອນ, ຮ້ອງເພງເພິ່ນກໍ່ບໍ່ເປັນ, ມີແຕ່ເພິ່ນໄປເບິ່ງ, ຟ້ອນເພິ່ນກໍ່ຟ້ອນລວມຫັ້ນ. ເພິ່ນຢູ່ນໍາໝູ່ກໍ່ໄດ້ແຕ່ເພິ່ນ ເຮັດບໍ່ເປັນ, ບໍ່ມັກປານໃດ. ນີ້ທໍາມະດາແມ່ເຖົ້າບຸນຫຼ້າບໍ່ໄດ້ໄປໃສແລ້ວແມ່ເພິ່ນບໍ່ໃຫ້ໄປ, ຄັນບໍ່ແມ່ນປ້າລຸງເພິ່ນໃຫ້ໄປ, ແມ່ເພິ່ນໃຫ້ໄປກໍ່ໄປໄດ້, ແມ່ເພິ່ນບໍ່ໃຫ້ໄປກໍ່ໄປບໍ່ໄດ້. ເວລານອນ ເພິ່ນກໍ່ນອນເຮືອນດຽວກັບກັບແມ່, ເພິ່ນນອນບ່ອນໃຜບ່ອນມັນ. ຕອນເພິ່ນເປັນສາວນີ້ເຂົ້າເຮັດການປະຕິວັດແລ້ວ, ເພິ່ນບໍ່ໄດ້ຢູ່ບ້ານແລ້ວ, ໝາຍຄວາມວ່າແຕ່ຕອນເປັນສາວ ເພິ່ນໄດ້ອອກເຮັດການປະຕິວັດແລ້ວ, ເພິ່ນຍັງບໍ່ທັນມີແຟນເທື່ອ, ແລະເພິ່ນກໍ່ຍັງບໍ່ເຄີຍມີແຟນນໍາໝູ່, ເພິ່ນບໍ່ໄດ້ລົມເລື່ອງສ່ວນຕົວ, ຖືວ່າເພິ່ນສະຫຼະເລີຍເລື່ອງສ່ວນຕົວເພິ່ນນີ້.

ແຕ່ກ່ອນເວລາແມ່ເຖົ້າບຸນຫຼ້າອອກເຮັດການປະຕິວັດອ້າຍເພິ່ນເສຍແລ້ວຜູ້ໜຶ່ງ, ອ້າຍເພິ່ນເປັນເລຂາຕາແສງ. ເວລາແມ່ເຖົ້າບຸນຫຼ້າອອກ ກໍ່ແມ່ນເຂົາຫັ້ນແລ້ວເປັນຜູ້ໃຫ້ອອກ, ຈຸເອື້ອຍອ້າຍເພິ່ນໃຫ້ອອກ, ຂອງສັດຕູຊິຈັບເພິ່ນເດເວລາເຂົາເຮັດວຽກຕາແສງຢູ່ເມືອງ, ແຕ່ວ່າເພິ່ນບໍ່ທັນອອກຂາດຕົວ, ເວລານັ້ນແມ່ເພິ່ນຕາຍແລ້ວ.

ຄຳວ່າແມ່ ເພິ່ນສັ່ງຫັ້ນ ໜຶ່ງລະແມ່ນວ່າ ອອກເຮັດວຽກ ເຮັດງານແລ້ວເຮັດໃຫ້ມັນໄດ້, ບໍ່ໃຫ້ເຊົາ,ແມ່ເພິ່ນວ່າເຮັດຕາມຈຸດປະສົງ: ສອງບໍ່ໃຫ້ຂີ້ລັກ, ບໍ່ໃຫ້ເອົາເຄື່ອງຂອງຫຼວງ, ບໍ່ໃຫ້ຫຼິ້ນ ບໍ່ໃຫ້ກິນໂລງເລງ, ບໍ່ໃຫ້ໂລບຂອງຜູ້ອື່ນແມ່ເພິ່ນວ່າແນວນັ້ນຄວາມສັ່ງສອນຂອງແມ່ເພິ່ນ, ອັນທີສາມຕ້ອງປະຕິບັດ, ບໍ່ໃຫ້ກິນຟຸມເຟືອຍ. ມີເຄື່ອງກິນເຄື່ອງຢາກມາຊ່ວຍເອື້ອຍຊ່ວຍອ້າຍຢູ່ເຮືອນແມ່ເພິ່ນວ່າແນວນັ້ນ, ຄັນໄດ້ສິ້ນເສື້ອອີ່ຫຍັງຕ້ອງປະຢັດ, ບາງເທື່ອບາດເຈົ້າເຈັບເຈົ້າເປັນ ເຈົ້າຊິເອົາຢູ່ໃສແມ່ເພິ່ນວ່າ. ບາງທີແມ່ບໍ່ຢູ່ເອື້ອຍອ້າຍບໍ່ຮັກເຈົ້າ, ເຈົ້າຊິເອົາຢູ່ໃສ, ຕ້ອງປະຢັດໄດ້ອີ່ຫຍັງໆ ກໍ່ຕ້ອງເອົາໄວ້. ແມ່ເພິ່ນບອກວ່າຕ້ອງສາມັກຄີກັບໝູ່ຄູ່, ບໍ່ໃຫ້ເວົ້າແນວນີ້ແນວນັ້ນ, ບໍ່ໃຫ້ຄຽດໃຫ້ຊັງໝູ່, ໝູ່ເຮັດໂຕ ໂຕກໍ່ບໍ່ຕ້ອງເຮັດໝູ່,ໝູ່ໄປໂຕກໍ່ຕ້ອງໄປ, ບໍ່ໃຫ້ບັງບຽດສຽດສີຜູ້ອື່ນເພາະເຈົ້າຫັ້ນ ເປັນຄົນເດັກນ້ອຍ. ສອງມາແລ້ວ ພໍ່ແມ່ກໍ່ບໍ່ມີ ໃຫ້ໝູ່ຮັກເຈົ້າແດ່, ຢ່າສູ່ໃຫ້ໝູ່ຊັງ, ຊ່ວຍເຫຼືອໝູ່ຄູ່ເທົ່ານັ້ນແລ້ວແມ່ເພິ່ນບອກສອນ, ເອື້ອຍເພິ່ນບອກ: ນ້ອງເອີຍເຈົ້າໄປຫັ້ນຢ່າສູ່ລືມເຮົາເດີ ໄດ້ຫຍັງກໍ່ຝາກມາແດ່ ກໍ່ຄືແມ່ເພິ່ນບອກຫັ້ນແລ້ວ. ເພິ່ນວ່າຢ່າສູ່ກິນຟຸມເຟືອຍຫຼືວ່າຢ່າສູ່ ເຮັດແນວນີ້ແນວນັ້ນ ກັບຜູ້ບ່າວຜູ້ແພວ ເສຍປຽບເພິ່ນວ່າ,ໃຫ້ຟັງແມ່ຂັ້ນເທິງບອກສອນແນວໃດ, ເພິ່ນກໍ່ບອກແນວນັ້ນ.

ເວລາແມ່ເຖົ້າບຸນຫຼ້າຍັງເປັນຜູ້ສາວ ຫຼືວ່າເຮັດວຽກນຳກັນ ຢູ່ບ້ານດຽວກັນ ມີໝູ່ສະໜິດສະໜົມ ໄປໄຮ່ກໍ່ໄປນຳກັນ ຊ່ວຍເຫຼືອກັນ, ຈົນອອກເຮັດການປະຕິວັດ ຜູ້ອື່ນບໍ່ມີດອກ, ມີແຕ່ປ້າເພິ່ນຫັ້ນ, ດຽວນີ້ປ້າເພິ່ນຕາຍແລ້ວ, ແຕ່ກ່ອນພວກເພິ່ນຢູ່ເຮືອນດຽວ, ແຕ່ຕໍ່ມາປ້າເພິ່ນໄດ້ຜົວ ເພິ່ນອອກຢູ່ຕ່າງ

ຫາກ. ແຕ່ກ່ອນປ້າເພິ່ນກັບເພິ່ນຢູ່ກໍ່ຢູ່ນຳກັນ, ໄປໃສກໍ່ໄປນຳກັນ ເວລາສິ່ງຫາງໃຫ້ພະນັກງານ, ເວລາຕິດຕໍ່ຫຍັງ ເລັກໆນ້ອຍໆ ແມ່ເຖົ້າບຸນຫຼ້າ ໄປນຳເພິ່ນ, ເວລາກາງຄືນ ກາງເວັນ ແມ່ເຖົ້າບຸນຫຼ້າກໍ່ໄປນຳເພິ່ນ. ຊື່ປ້າເພິ່ນວ່າວິນຢຣຽນເຣີ. ປ້າເພິ່ນເສຍປີກາຍປີຊືນນີ້, ເພິ່ນເຖົ້າແລ້ວໃດ. ແຕ່ກ່ອນກໍ່ແມ່ນເພິ່ນຫັ້ນແລ້ວ ເຄື່ອນໄຫວນຳອິດສະຫຼະ ຢູ່ໃນບ້ານພວກແມ່ເຖົ້າບຸນຫຼ້ານີ້. ປ້ານີ້ບໍ່ມັກຢູ່ນຳຜູ້ອື່ນ. ຢູ່ກໍ່ຢູ່ທີ່ວໆໄປຊື່ໆໜາ, ບໍ່ສະໜິດສະໜົມ.

ບາດນີ້ໝູ່ຄູ່ຜູ້ຊາຍຂອງເພິ່ນຫາກບໍ່ແມ່ນຊູ້ເພິ່ນ ແຕ່ກໍ່ສະໜິດສະໜົມກັນທີ່ສຸດ, ພວກເພິ່ນ ຊ່ວຍເຫຼືອກັນອັນນີ້ມີແລ, ແມ່ເຖົ້າບຸນຫຼ້າວ່າ: ຫັ້ນເດອ້າຍກັນຜູ້ຢູ່ປາກເຊສູ່ມື້ນີ້ແລ້ວ, ດຽວນີ້ເພິ່ນກໍ່ຍັງຢູ່, ແຕ່ກ່ອນເພິ່ນກໍ່ແມ່ນນ້ອງຜົວ ເອື້ອຍຂອງແມ່ເຖົ້າບຸນຫຼ້າ, ພວກເພິ່ນຢູ່ນຳກັນ ແຕ່ຍັງນ້ອຍໆ, ເວລາໄປເຮັດໄຮ່ເຮັດສວນກໍ່ໄປນຳກັນ, ຈົນອອກເຮັດການປະຕິວັດພວກເພິ່ນ ກໍ່ອອກນຳກັນ, ຖືວ່າເພື່ອນຊາຍຂອງເພິ່ນຫັ້ນແລ້ວ ແມ່ເຖົ້າບຸນຫຼ້າເວົ້າໃຫ້ໝູ່ຊາຍຂອງເພິ່ນວ່າຢ່າສູ່ເລົ່າມາໜາຄວາມເກົ່າ. ແຕ່ກ່ອນ ແຕ່ໝູ່ຊາຍຂອງເພິ່ນໄປໃສ່ແຮ້ວໃສ່ລິກຫັ້ນ, ຈົນນົກອີ່ສັງຖືກແຮ້ວ (ພາສາລາວເຮົາເວົ້າບໍ່ໄດ້), ຂອງແຕ່ກ່ອນແມ່ເຖົ້າບຸນຫຼ້າ ນຸ່ງສິ້ນຮັດເອິກເດ, ຢູ່ແອວກໍ່ຮັດສາຍແອວ, ຄວາມເພິ່ນເວົ້າຢູ່ເມາະໆ, ຄືຄວາມລາວແມ່ນວ່ານາງ! ໝູ່ຊາຍປ້າບຸນຫຼ້າວ່າເປີດ ແມ່ທິວສິ້ນເຈົ້າຫັ້ນເພິ່ນວ່າ. ລາວປົດນົກອອກຈາກເຊືອກ, ລາວເອົານົກມາໃສ່ໃນພົກສິ້ນແມ່ເຖົ້າບຸນຫຼ້າ. ໂຮເບິ່ງນົກໂຕນັ້ນ ມັນຕອດທ້ອງ ແມ່ເຖົ້າບຸນຫຼ້າຈົນເລືອດອອກ, ແມ່ເຖົ້າບຸນຫຼ້າໄຫ້ແລ້ວ, ແມ່ເຖົ້າບຸນຫຼ້າວ່າ ເອົາອອກໜາ! ເອົາອອກໜາ! ໝູ່ຊາຍເພິ່ນວ່າ: ອິດເອົາຕີ! ແມ່ເຖົ້າບຸນຫຼ້າໄຫ້ຢູ່ຫັ້ນ, ບາດໝູ່ເພິ່ນຢາກຮ້າຍໝູ່ເພິ່ນວ່າເບິ່ງ, ໝູ່ເພິ່ນໄຂ, ພໍດີນົກກໍ່ບິນເລີຍ, ເບິ່ງເລືອດທ້ອງແມ່ເຖົ້າບຸນຫຼ້າຈົນໄຫຼອອກ. ໝູ່ຊາຍເພິ່ນເຮັດວຽກເຮັດງານຢູ່ສະຫວັນນະເຂດລາວຢູ່ກອງພັນທີ 4, ເວລາແມ່ເຖົ້າຮຽນຢູ່ຫວຽດນາມ, ລາວກໍ່ຂຽນໜັງສືໄປຫາ, ແມ່ເຖົ້າບຸນຫຼ້າ ກໍ່ຍັງຂຽນໜັງສືໃຫ້ລາວ. ຄວາມຮັກຄວາມແພງພວກເພິ່ນຫັ້ນໜາ ຕັ້ງຮັກແພງກັນອີ່ຫຼືອີ່ຫຼໍ, ດຽວນີ້ ລາວກໍ່ມາຢາມແມ່ເຖົ້າບຸນ

ຫຼ້າທຸກປີ, ໝູ່ຜູ້ອື່ນກໍ່ວ່າຊູ້ວ່າແຟນແມ່ເຖົ້າບຸນຫຼ້າ, ແຟນແນວໃດເອື້ອຍຂອງແມ່ເຖົ້າບຸນຫຼ້າກໍ່ເອົາກັບອ້າຍຂອງລາວ. ນອນໄຮ່ແມ່ເຖົ້າບຸນຫຼ້າ ໝູ່ຊາຍເພິ່ນກໍ່ບໍ່ນອນ, ລາວບໍ່ນອນເມືອລາວກໍ່ຢ້ານ, ໃຫ້ແມ່ເຖົ້າບຸນຫຼ້າເມືອສົ່ງ, ແມ່ເຖົ້າບຸນຫຼ້າຢ້ານກໍ່ໃຫ້ລາວມາສົ່ງ, ສຸດທ້າຍພວກເພິ່ນກໍ່ສົ່ງກັນຈົນຮອດທ່ຽງຄືນ, ເຈົ້າສົ່ງຂ້ອຍ, ຂ້ອຍສົ່ງເຈົ້າຢູ່ປານນັ້ນ, ຈົນພີ່ອ້າຍແມ່ເຖົ້າບຸນຫຼ້າໄປສົ່ງຈຶ່ງແລ້ວ, ລາວໃຫ້ແມ່ເຖົ້າບຸນຫຼ້ານອນຖຽງລາວ ແມ່ເຖົ້າບຸນຫຼ້າກໍ່ບໍ່ນອນ, ເພິ່ນບໍ່ຢາກນອນ ຢາກເມືອຫາແມ່ເພິ່ນ, ເວລາອອກເຮັດວຽກອິດສະຫຼະ ແມ່ນພວກເພິ່ນອອກພ້ອມກັນ. ແຕ່ດຽວນີ້ລາວກໍ່ໄດ້ບຳນານແລ້ວຄືກັນກັບແມ່ເຖົ້າບຸນຫຼ້າ.

ດຽວນີ້ສະແດງຄວາມຂອບອົກຂອບໃຈ ຕໍ່ນັກຄົ້ນຄວ້າມາເກັບກຳຂໍ້ມູນກ່ຽວກັບເພິ່ນກໍ່ໄດ້ ຮູ້ສຶກດີອົກດີໃຈ ທີ່ສຸດ. ເພິ່ນຊື່ວ່າ ບຸນຫຼ້າ ອາຍຸໄດ້ 80 ປີແລ້ວດຽວນີ້, ເພິ່ນກໍ່ອອກເຮັດການປະຕິວັດ ລະແມ່ນວ່າບໍ່ມີຜູ້ຊຸກຍູ້ລະກໍ່ບໍ່ມີໃຜຊັກຊວນ, ເພິ່ນຫາກຕື່ນຕົວເອງເພາະວ່າແຕ່ກ່ອນເພິ່ນເຫັນວ່າແມ່ເພິ່ນກໍ່ຕາຍຕັ້ງແຕ່ເພິ່ນຍັງນ້ອຍ. ເລື່ອງປະຫວັດແມ່ເຖົ້າບຸນຫຼ້າ, ເລື່ອງຄອບຄົວຂອງເພິ່ນແມ່ນວ່າ ພໍ່ຂອງເພິ່ນຫັ້ນ ເອົາເມຍສອງຄົນ, ເມຍທີໜຶ່ງແມ່ນຕາຍ, ໄດ້ລູກຜູ້ຊາຍໝົດ, ແລ້ວລາວເອົາເມຍ ແມ່ຂອງແມ່ເຖົ້າບຸນຫຼ້ານີ້ອີກ ກໍ່ໄດ້ລູກ 4ຄົນ ຊາຍສອງຄົນຍິງສອງຄົນ. ປະຈຸບັນແມ່ຂອງເພິ່ນຕາຍໝົດແລ້ວບໍ່ມີໃຜ, ມີແຕ່ແມ່ເຖົ້າບຸນຫຼ້າຜູ້ດຽວ. ຈັ່ງຊັ້ນໃນເມື່ອວ່າເພິ່ນບໍ່ມີພໍ່ແມ່ແລ້ວ, ແມ່ນວ່າຄືພວກເຮົາເຫັນເພິ່ນຫັ້ນແຫລະ. ສະຫາຍດວງຕີກໍ່ເຫັນສະຫາຍດາວກໍ່ເຫັນ ແມ່ເຖົ້າບຸນຫຼ້າ ເພາະເຂົາເຮັດການປະຕິວັດເຂົາກໍ່ເວົ້າ, ເພາະວ່າແຕ່ກ່ອນ ແມ່ເຖົ້າບຸນຫຼ້າ ເຄື່ອນໄຫວຢູ່ຂອບເຂດບ້ານຂອບເຂດຕາແສງເພິ່ນເອງນີ້. ໂດຍສະເພາະ ກໍ່ແມ່ນພວກເພິ່ນຕິດຕໍ່ສົ່ງຂ່າວຫາຫັ້ນແລ້ວ, ພວກເພິ່ນແມ່ນເຮັດວຽກຢູ່ໃນຕາແສງໃນບ້ານນີ້ກໍ່ດົນເຕີບແລ້ວ, ນັບແຕ່ເພິ່ນ ອາຍຸ 14 ປີ ໄດ້ເຂົ້າການປະຕິວັດແລ້ວ, ພໍດີໄດ້ສອງປີ.

ເວລາເພິ່ນຢູ່ຕາແສງບ້ານດົມ ຕາແສງລຽງລວງ ເພິ່ນກໍ່ຕິດຕໍ່ຫາເມືອງຫັ້ນແລ້ວ, ຫາຄົນຢູ່ລັບຫັ້ນແລ້ວ. ບໍ່ແຫລະຢູ່ດາກຈຶງພຸ້ນ. ເພິ່ນເປັນເຜົ່າ

ຕະລ່ງງ ບ້ານດາກແຫຼ່ງ, ຄັນດາກດຣາຍ ຕາແສງໜຶ່ງຕ່າງຫາກ. ເພິ່ນເລີຍເຫັນໝູ່ເຮັດວຽກເຮັດງານ ເພິ່ນກໍ່ສະໝັກໄປ, ໄປລະເພິ່ນເຮັດວຽກຢູ່ຕາແສງ, ຕາແສງດາກລວງ ມັນກໍ່ກວ້າງເຕີບແລ້ວຢ່າງໜ້ອຍ. ແຕ່ກ່ອນປິດຝຣັ່ງຢູ່ຈະວານ, ບາດນີ້ເພິ່ນຂົນຂວາຍເອົາເວລາສັດຕູເຂົ້າຕີປິດຈະວານ, ຕີປິດຕາຊາງຫັ້ນ. ແມ່ເຖົ້າບຸນຫຼ້າ ກໍ່ເຄື່ອນໄຫວໝົດ, ກາງຄືນກາງຄ່ຳກໍ່ໄປ, ໂດຍສະເພາະເວລາເຂົາຢູ່ລັບຫັ້ນ, ເພິ່ນບໍ່ໄດ້ຢູ່ເຮືອນເພິ່ນມີແຕ່ໄປ, ກາງຄືນເພິ່ນກໍ່ໄປ, ນ້ຳມາກເພິ່ນກໍ່ໄປ, ຝົນຕົກເພິ່ນກໍ່ໄປຫັ້ນແລ້ວ. ພໍ່ແມ່ເພິ່ນກໍ່ຕາຍໝົດແລ້ວ. ໄລຍະແມ່ຂອງເພິ່ນຍັງຢູ່ ແມ່ເພິ່ນກໍ່ເຫັນພະນັກງານທະຫານປະຕິວັດຫັ້ນ. ແມ່ເພິ່ນລະຊຸກຍູ້, ບໍ່ມີໃຜຢູ່ນຳແມ່ເພິ່ນ, ແມ່ບໍ່ໃຫ້ໄປ ແມ່ເຖົ້າບຸນຫຼ້າພັດໄປ ແມ່ເພິ່ນກໍ່ໃຫ້ໄປ, ເວລານັ້ນ ເພິ່ນຍັງນ້ອຍຢູ່, ແມ່ເພິ່ນວ່າ ລູກເອີຍໄປສາ ເຮັດວຽກເຮັດງານ ທຸກກໍ່ຢູ່ນີ້, ຢູ່ນຳເຂົາແລ້ວແມ່ເຖົ້າບຸນຫຼ້າກໍ່ໄປ. ໄປບໍ່ເຖິງໄປຢູ່ເມືອງດາກຈຶ່ງຫັ້ນ. ເພິ່ນເຮັດວຽກ ຖ້າສະມາຄົມແມ່ຍິງ, ແຕ່ກ່ອນເພິ່ນຂົນຂວາຍ. ສະໄໝອາເມລິກາ,ປີກ່ອນທັນທິດຫັ້ນແມ່ເຖົ້າບຸນຫຼ້າບໍ່ຈື່ຈັກປີໃດ, ເອີປີ 1959 ທັນທິດ. ກ່ອນທັນທິດ ປີ 1958–1959 ແມ່ນບໍ ຕອນເຂົາເຈົ້າອອກເປີດເຜີຍ ວັນທີ 12 ຕຸລາເດ.

ເວລານັ້ນລຸງຄຳສຸກ ແມ່ນເຮັດວຽກຢູ່ແຖວບ້ານຂອງແມ່ເຖົ້າບຸນຫຼ້າຫັ້ນ. ລຸງຄຳສຸກ ໄຊຍະແສງ ເຮັດວຽກຢູ່ຫັ້ນ, ໄລຍະນັ້ນແມ່ນວ່າທັນທິດ, ທັນທິດແລ້ວກໍ່ອອກເປີດເຜີຍ, ມີເຄື່ອງຂອງໂທລະເລກເຮັດວຽກຂອງໂທລະເລກ, ແມ່ເຖົ້າບຸນຫຼ້າໄລຍະນັ້ນແມ່ນເມືອບ້ານເມືອເຮັດວຽກຢູ່ຕາແສງຫັ້ນ. ສຸດທ້າຍ ສັດຕູມາຊື່ວ່າບັກຄຳ ຄົນເລົ່າງາມ ບ້ານນາເສ້ຍຫັ້ນ. ບັກຄຳຫັ້ນ ແຕ່ກ່ອນມັນເຮັດວຽກສິ່ງເຂົ້າສິ່ງນ້ຳໃຫ້ຈູອ້າຍກັນນີ້ ຈຸຄຳນີ້, ມັນໂຕນອອກໄປນຳຈຸຝ່າຍສັດຕູ. ເພິ່ນຮູ້ຢູ່ບ້ານ ແມ່ເຖົ້າບຸນຫຼ້າຫັ້ນ, ມັນເລີຍຈັບແມ່ເຖົ້າບຸນຫຼ້າ, ຈູອ້າຍກັນຫັ້ນບໍ່ຢູ່ຈຸທີ່ເຮັດວຽກກັບບັກຄຳພອງ, ເຮັດວຽກສື່ສານ, ຍ້ອນອ້າຍກັນໄລຍະນັ້ນແລ້ວແມ່ເຖົ້າບຸນຫຼ້າຈຶ່ງຖືກຈັບ. ລຸງບຸນສຸກຫັ້ນແຫລະ ເຂົາເຮັດໂທລະເລກເຮີຍ ແມ່ເຖົ້າບຸນຫຼ້າເລີຍຖືກສັດຕູຈັບ, ແມ່ເຖົ້າບຸນຫຼ້າໂອ່ຍ! ເກືອບຕາຍເຂົາ

ເຊົ້າຕີຈົນໝົດ 24 ຊົ່ວໂມງ, ໝົດມື້ກັບໝົດຄືນ ມັນຕີມັນເຕະແມ່ເຖົ້າບຸນຫຼ້າ, ມັນໃຫ້ເອົາໂທລະເລກທັ້ນມາໃຫ້ມັນ, ແຕ່ໂທລະເລກພວກເຮົາເຮັດເຮ່ຍ. ເພິ່ນຄັນຊິເວົ້າໂຕນີ້ທັ້ນແມ່ນຍາວ, ຍາວແທ້ໆໂຕນີ້ເພິ່ນວ່າ. ສັດຕູປາບທາລຸນເພິ່ນ: ນີ້ເດທີ່ງກັບປືນແຕ່ມັນບໍ່ມີດອກປືນ. ທະຫານ 20 ຄົນ, 23 ຄົນ ກັບນາຍເຂົາ. ພໍດີເຂົາຈັບເພິ່ນລະຕີຈົນເພິ່ນຕາຍຄືນ. ເພິ່ນຮູ້ເມື່ອ ເຂົາໂຈມເພິ່ນຊື່ໆ ແຕ່ວິພອນພວກເພິ່ນລືມຂາໄຂວ່ຢູ່ເດີ່ນບ້ານທັ້ນແລ້ວ, ຢູ່ທັ້ນພວກມັນມັດແມ່ເຖົ້າບຸນຫຼ້າ ກັບຫຼັກຄວາຍ, ມັດແລ້ວກໍ່ຕີທັງຕີທັງເຕະເພິ່ນ, ຈົນເລືອດດັງເລືອດປາກອອກ, ຈົນເພິ່ນຕາຍຄືນ, 4ໂມງເຊົ້າພຸ້ນມັນຈັ່ງປະ. ມັນມີແຕ່ຖາມໂທລະເລກອ້າຍກັນ,ອ້າຍກັນໂທທີ່ຢູ່ນຳມັນທັ້ນ, ອ້າຍກັນກໍ່ເລືອດປາກອອກ, ມັນເຮັດຄືແນວນັ້ນ. ຫຼັງຈາກນັ້ນແມ່ເຖົ້າບຸນຫຼ້າກໍ່ອອກເລີຍ, ເພິ່ນບໍ່ໄດ້ຢູ່ອີກບ້ານທັ້ນ, ເພິ່ນຢູ່ເມືອງເລີຍ. ແຕ່ກ່ອນເພິ່ນກໍ່ຢູ່ເມືອງແລ້ວແຕ່ໄລຍະເພິ່ນເຮັດວຽກທັ້ນ.

ເລື່ອງຖານະຕໍາແໜ່ງຂອງເພິ່ນທັ້ນບໍ່ມີຖານະຕໍາແໜ່ງອີສັງ, ເພິ່ນມີແຕ່ເຮັດວຽກແນວໂຮມກັບແມ່ຍິງ, ເປັນປະທານສະຫະພັນແມ່ຍິງປີເຮົາຍຶດອໍານາດທັ້ນ ພວກເພິ່ນລວມກັບສາລະວັນ ກໍ່ໄປຢູ່ກັບສາລະວັນອີກ. ເພິ່ນກໍ່ໄປເປັນປະທານສະຫະພັນແມ່ຍິງ ຢູ່ສາລະວັນ. ເພິ່ນຢູ່ 9ປີ ແຕ່ສາລະວັນທັ້ນ, ກໍ່ກັບຄືນເຊກອງ, ເພິ່ນຢູ່ແຂວງເຊກອງກໍ່ເປັນປະທານສະຫະພັນແມ່ຍິງຢູ່ແຂວງເຊກອງອີກ. ແນວນັ້ນແມ່ນວ່າປະຫວັດການເຄື່ອນໄຫວຂອງແມ່ເຖົ້າບຸນຫຼ້າ ມັນເປັນຄືແນວນັ້ນ. ແຕ່ວ່າເວົ້າເລື່ອງສັດຕູປາບເພິ່ນທັ້ນ ເພິ່ນເວົ້າບໍ່ເປັນ, ຄັນເພິ່ນເວົ້າເປັນທັ້ນ ເພິ່ນຈະເວົ້າຢູ່ໃນປະຫວັດສາດເພິ່ນກໍ່ມີ, ຈັກແມ່ນໃຜມ້ຽນປະຫວັດສາດຂອງເພິ່ນ, ເພິ່ນກໍ່ໄດ້ສິ່ງຢູ່ແຂວງທັ້ນ, ໃນນັ້ນ ໄດ້ຈົດລະອຽດແລ້ວວ່າ ສັດຕູໄດ້ເຮັດໃສ່ເພິ່ນຄືແນວນີ້ແນວນັ້ນ. ອັນເລື່ອງເພິ່ນໄປເຮັດວຽກງານຜ່ານຜ່າ ມີຄວາມທຸກຍາກຢູ່ສາລະວັນທັ້ນແມ່ນຈັກທໍ່ໃດ, ຈຸຂອງເພິ່ນພຸ້ນຢູ່ນະຄອນເພັງພຸ້ນ. ເພິ່ນໄປມື້ນັ້ນແລ້ວອ້າຍເຊີນເວົ້າວ່າ, ເອື້ອຍບຸນຫຼ້າຕັ້ງມີເຄື່ອງລາວເວົ້າ, ພວກປະຕິການບໍ່ໄດ້ພົບ ເພິ່ນຈັກເທື່ອລາວວ່າ, ຂອງແມ່ເຖົ້າບຸນຫຼ້າໄປນະຄອນເພັງພຸ້ນ, ບາດນີ້ຫຼັງຈາກເພິ່ນໄປ, ປະຕິການຍິງແລ້ວ, ແມ່ເຖົ້າ

ບຸນຫຼ້າຫັ້ນ ໄປແຕ່ນະຄອນເພັງເມືອເມືອງວາປີ. ກໍ່ຫຼັງເພິ່ນເມືອປະຕິການກໍ່ຍິງແຫລະ, ມັນລັດຍິງແລ້ວ. ເລື່ອງການເຄື່ອນໄຫວຂອງເພິ່ນແມ່ນ ວ່າທຸກວັນເວົ້າສະເພາະຢູ່ແຂວງເຊກອງນີ້ແມ່ນບໍ່ມີໃຜທຸກຄືເພິ່ນ, ຄັນວ່າແນວນັ້ນຜູ້ໃດກໍ່ວ່າທຸກອັນເວົ້າເລື່ອງຄວາມທຸກ, ຄວາມຜ່ານຜ່າ,ຄວາມຫຍຸ້ງຍາກ, ຫັນແຕ່ວ່າເພິ່ນທຸກລື່ນກວ່າໝູ່ແຫລະ, ອັນນັ້ນແມ່ນວ່າການເຄື່ອນໄຫວຂອງເພິ່ນ. ເພິ່ນວ່າໄລຍະເຂົາປົດປ່ອຍທົ່ງເຫຼັກຫັ້ນມີແລ້ວຝຣັ່ງ, ເຫັນແລ້ວໄລຍະຫັ້ນ, ໄລຍະມັນຈັບແມ່ເຖົ້າບຸນຫຼ້າຫັ້ນແມ່ນສະໄໝອາເມລິການີ້.ປີຫັນທິດກໍ່ຍັງວ່າສະໄໝອາເມລິກາ, ຫັນທິດກໍ່ປີ1959ຂອງຈຸລຸງຄຳຟອງຢູ່ນຳລຸງຄຳສຸກຫັ້ນກໍ່ເຮັດວຽກໂທລະເລກນຳແມ່ເຖົ້າບຸນຫຼ້າ, ບັກຄຳຟອງ ຫັ້ນແມ່ນວ່າຄົນປະຕິວັດໂຕນຫາສັດຕູ. ຄຳຟອງນີ້ແມ່ນຄົນເລົ່າງາມ ຄົນບ້ານນາເສັຍນີ້ ໂຕນຫາສັດຕູ ແລ້ວໂທລະເລກຫັ້ນແມ່ນມັນປະຢູ່ເຮືອນແມ່ເຖົ້າບຸນຫຼ້າຫັ້ນໝົດ, ມັນຖາມເພາະມັນຢາກເອົາໂທລະເລກຫັ້ນ. ບາດເຂົາຫັ້ນອັນໜຶ່ງແມ່ນຢາກເອົາອ້າຍກັນ, ມັນຢາກໄດ້; ອັນທີສອງມັນຢາກໄດ້ຄຳບູ່, ທ່ານລຸ້ຍ ດຽວນີ້ຫັ້ນໝາ ເພາະລາວຫັ້ນຢູ່ຄະນະເມືອງແຕ່ກ່ອນ, ອ້າຍກັນ ກໍ່ແມ່ນຢູ່ກັບ ບັກຄຳຟອງຫັ້ນ.

ແລ້ວບາດນີ້ຄຳຟອງຫັ້ນລະໂຕນໄປຫາສັດຕູ, ພໍດີຜູ້ດຽວແມ່ເຖົ້າບຸນຫຼ້າເຂົາເຫັນຢູ່ບ້ານຫັ້ນ, ເຂົາເລີຍຈັບເພິ່ນ. ພວກເຂົາວ່າ ແມ່ເຖົ້າບຸນຫຼ້ານີ້ແຫລະລັງອິດສະຫຼະແຕ່ກ່ອນ. ເວລານັ້ນ ພາສາລາວ ເພິ່ນກໍ່ບໍ່ຮູ້ປານໃດ, ກໍ່ໂຕຄຳຟອງຫັ້ນແລ້ວ ມາບ້ານພາທະຫານສັດຕູມາຈັບເອົາແມ່ເຖົ້າບຸນຫຼ້າ ເວລາ 4 ໂມງເຊົ້າ. ພວກມັນຈັບເພິ່ນ, ແຕ່ບໍ່ໄດ້ມັດ. ຕາມເພິ່ນເວົ້າເດີ;

ຕອນເຊົ້າຫັ້ນລະ ແມ່ນວ່າຕອນ 3 ໂມງເຂົາມາ, ເຂົາໄປພຸ້ນເລີຍບ່ອນເຂົາເອົາໄວ້ ໂທລະເລກພຸ້ນ, ເຂົາບໍ່ແວ່ບ້ານ, ເຂົາໄປບ່ອນປ່າເລີຍ. ມາແຕ່ປ່າຫັ້ນເຂົາບໍ່ເຫັນໂທລະເລກຂອງເຂົາເອົາໜີແລ້ວເດ, ເຂົາຍ້າຍບ່ອນໃໝ່ແລ້ວ. ໄທບ້ານຫັ້ນເຂົາຍ້າຍບ່ອນໃໝ່ແລ້ວ, ແລ້ວເຂົາຈຶ່ງເຂົ້າບ້ານ, ເຂົາເຂົ້າບ້ານກໍ່ບໍ່ຮູ້ອີ່ສັງ, ພວກແມ່ເຖົ້າບຸນຫຼ້າກໍ່ເຮັດກິນໃຫ້ເຂົາຕັກນ້ຳຕັກໃນ. ພໍດີເຂົາຖາມ: ໃສອ້າຍກັນ, ໃສຄຳວ່າເຂົາບໍ່ເຫັນຜູ້ອື່ນເຂົາຖາມ ແມ່ເຖົ້າບຸນຫຼ້ານີ້ບໍ່

ແມ່ນ. ພໍດີກາງຄືນ ຫັ້ນມັນເວົ້າແຫລະ, ມັນເວົ້ານໍາໄທບ້ານຫັ້ນ, ມັນວ່າມີແຕ່ຜູ້ດຽວ ແມ່ເຖົ້າບຸນຫຼ້ານີ້ແຫລະຢູ່, ໂຕເພິ່ນ ມັນນີ້ແຫລະເຊື່ອງ, ຈຸ້ນີ້ແຫລະຈັບແມ່ເຖົ້າບຸນຫຼ້າ. ເຂົາວ່າຈັບ, ພໍດີຈຸອ້າຍ ຂອງບຸນຫຼ້າຫັ້ນລາວເປັນ ພະນັກງານຄະນະແສງ, ເປັນໜ່ວຍພັກຕາແສງລຽງລວງຫັ້ນ, ລາວວ່າໃຫ້ເຈົ້ານີ້ ອັນນີ້ ແມ່ເຖົ້າບຸນຫຼ້າວ່າເຮົາກໍ່ຍັງບໍ່ທັນມີອີ່ສັງ, ບໍ່ທັນເຂົ້າສະມາຊິກອີ່ສັງດອກ, ເປັນປະຊາຊົນທໍາມະດານີ້ແຫລະ. ແຕ່ພວກແມ່ເຖົ້າບຸນຫຼ້າໄດ້ຍິນໝູ່ເວົ້າ ເຂົາຊຽນກົດລະບຽບຂອງພັກ, ວ່າໃຫ້ແມ່ເຖົ້າບຸນຫຼ້າໄປ. ເຂົາກໍ່ວ່າໝົດບ້ານ. ແມ່ເຖົ້າບຸນຫຼ້າກໍ່ໄດ້ຍິນ: ຄັນເຈົ້າຢູ່ເຂົາຂ້າເຈົ້າ ເຂົາຊິຂ້າເຈົ້າຂອງເຂົາວ່າຈັບ ແມ່ເຖົ້າບຸນຫຼ້າຕ້ອງເອົາໄປ, ຄັນບໍ່ເອົາໄປຕ້ອງຂ້າເພິ່ນຢູ່ບ້ານ ເຂົາວ່າແນວນັ້ນສັດຕູ. ແມ່ເຖົ້າບຸນຫຼ້າວ່າບໍ່, ເພິ່ນວ່າບໍ່ໜີ, ຄັນຂ້ອຍໜີພວກເຈົ້າຕາຍ, ເພິ່ນວ່າແນວນັ້ນແມ່ເຖົ້າບຸນຫຼ້າ, ເຂົາເຮັດຈັ່ງວ່າເຮັດຢູ່ເລົ່າງາມ. ແມ່ເຖົ້າບຸນຫຼ້າ ວ່າເຂົາເຮັດລະເດປີນັ້ນ. ປີແມ່ເຖົ້າບຸນຫຼ້າວ່າ: ເຂົາປາບປະຊາຊົນແຕ່ວ່າບໍ່ໜີ. ບາດນີ້ເຂົາປີ້ນວ່າແມ່ເຖົ້າບຸນຫຼ້ານີ້ ເປັນເມຍຂອງນ້ອງ ກໍາມະການສັດຕູ ແຕ່ກ່ອນ, ໃຫ້ເປັນເມຍຂອງນ້ອງກໍາມະການສັດຕູຫັ້ນ,ອ້າຍແມ່ເຖົ້າບຸນຫຼ້າຫັ້ນ ໃຫ້ແມ່ເຖົ້າບຸນຫຼ້າ ນອນຢູ່ຫັ້ນກາງຄືນ. ເພິ່ນໄປນອນແຫລະຢູ່ຫັ້ນ; ເພິ່ນນອນນອນບໍ່ຫຼັບໝົດຄືນ.

ແມ່ເຖົ້າບຸນຫຼ້າປອມເປັນເມຍເຂົາ, ເພິ່ນນອນບໍ່ໄດ້; ເພິ່ນມີແຕ່ລຸກໆນັ່ງໆຢູ່ນັ້ນແຫລະ, ຂອງເຂົາກໍ່ຍາມໝົດຄືນ, ຈັກໜ່ອຍ 4ໂມງເຊົ້າ ເຂົາມາແຫລະ, ເຂົາຈັບອາວຍອນອີກ ອາວຍອນດຽວນີ້ຫັ້ນ, ເຂົາຈັບອາວ ຍອນເວລາເຂົາມາເຮືອນຫັ້ນ, ເຂົາບໍ່ໃຫ້ພວກແມ່ເຖົ້າບຸນຫຼ້າຍອນຫັ້ນ. ເຂົາເອົາ ອາວຜ້າຫັ້ນປົກໝົດ ແຕ່ຕີນສຸດຫົວບໍ່ໃຫ້ແມ່ເຖົ້າບຸນຫຼ້າຮູ້. ບັດຕອນເຊົ້າ ຊິເອົາແມ່ເຖົ້າບຸນຫຼ້າຫັ້ນ ເຂົາຈັບຍອນຫັ້ນແຫລະໄປ, ຜູ້ໜຶ່ງບັກຄໍາຟອງ ຜູ້ໜຶ່ງລະທະຫານ ອີກສີ່ຄືນໄປແລ້ວ ແມ່ເຖົ້າບຸນຫຼ້າຖາມໄປໃສ? ໄປພຸ້ນແຫລະເຂົາວ່າ, ເຂົາກໍ່ດຶງແກ່ແມ່ເຖົ້າບຸນຫຼ້າແຕ່ບ້ານ,ບ້ານພວກ ເພິ່ນມີແຕ່ຫີນ, ເຂົາດຶງແມ່ເຖົ້າບຸນຫຼ້າ ແຕ່ເຮືອນຮອດຖະໜົນພຸ້ນ. ພໍດີຢູ່ນີ້ ແມ່ເຖົ້າບຸນຫຼ້ານັ່ງ, ມີ

ທະຫານຍາມອ້ອມເພິ່ນມີປືນໝົດສູ່ຄົນ. ບັກຄໍາຟອງເວົ້າວ່າ:ເຈົ້າຮູ້ບໍ່ຂ້ອຍ? ແມ່ເຖົ້າບຸນຫຼ້າບໍ່ຕອບ, ເຈົ້າບໍ່ຮູ້ບໍ່ຂ້ອຍສັດຖາມ? ພໍດີອາວຍອນເພິ່ນພັດວ່າຮູ້ຕິ, ແມ່ເຖົ້າບຸນຫຼ້າ ກໍ່ເວົ້າຄວາມລາວຫັ້ນລະວ່າກໍ່ຮູ້. ແຕ່ເພິ່ນບໍ່ໄດ້ບອກ, ເຈົ້າຮູ້ບໍ່ຂ້ອຍ? ຄໍາຟອງວ່າ.ຄໍາຟອງວ່າແຕ່ກ່ອນເຈົ້າເປັນນ້ອງຂ້ອຍ, ເປັນນ້ອງຮັກ, ອ້າຍຮັກແຕ່ກ່ອນ! ເວລາຄໍາຟອງຍັງຢູ່ລັບ. ແມ່ເຖົ້າບຸນຫຼ້າ ຮູ້ເຈົ້າຄັນເຈົ້າບອກ, ຄັນເຈົ້າບໍ່ບອກຂ້ອຍບໍ່ຮູ້, ຄໍາຟອງວ່າ: ດຽວນີ້ພວກເຮົາມານີ້ ບໍ່ແມ່ນທະຫານສັດຕູເດີ, ບໍ່ໃຫ້ຢ້ານ ແມ່ນທະຫານເຮົານີ້ ທາງພວກລັດຖະບານລຸງໄກສອນ ໃຫ້ໄປເອົາໂທລະເລກນໍາພວກເຈົ້າ (ພວກສັດຕູມັນເວົ້າເຕືອະພວກຂອງແມ່ເຖົ້າບຸນຫຼ້າ), ບໍ່ມີໂທລະເລກ ເຮັດວຽກວ່າແນວນັ້ນ. ແມ່ເຖົ້າບຸນຫຼ້າວ່າເຮົາບໍ່ຮູ້, ຄໍາຟອງວ່າ ພວກເຈົ້າປະຢູ່ໃສ? ຄໍາຟອງວ່າ ເຈົ້າຫັ້ນແຫລະຮູ້, ເຈົ້າຫັ້ນແລ້ວ ໄປລ້ຽງພວກເຮົາແຕ່ກ່ອນ, ແມ່ເຖົ້າບຸນຫຼ້າວ່າ: ຂ້ອຍນີ້ແຫລະ ລ້ຽງພວກເຈົ້າແຕ່ກ່ອນ, ແຕ່ຂ້ອຍບໍ່ຮູ້ວ່າພວກເຈົ້າປະໄວ້ຢູ່ໃສ, ໂທລະເລກຢູ່ໃສພວກເຈົ້າປະບັກຄໍາຟອງຕີແມ່ເຖົ້າ ບຸນຫຼ້າອີກ, ຕີ, ເຕະ, ແມ່ເຖົ້າບຸນຫຼ້າ, ຈັກໜ່ອຍບັກຄໍາຟອງຖາມອີກ: ບອກໃດດຽວນີ້ສູນກາງ ຈັດຕັ້ງພວກເຮົາໃຫ້ໄປເອົາໂທລະເລກ ແມ່ເຖົ້າບຸນຫຼ້າວ່າ ຈັກຊິບອກອີ່ສັງ, ຂ້ອຍບໍ່ຈັກຮອດໂທລະເລກ. ແມ່ເຖົ້າບຸນຫຼ້າພວກເຈົ້າປະພວກເຈົ້າເອົາໄວ້ໃສ, ພວກເຈົ້າເອົາຢູ່ໃສ! ຈັກໜ່ອຍເຂົາບໍ່ເວົ້າເລື່ອງນັ້ນ, ເຂົາຖາມວ່າອ້າຍກັນເດຢູ່ໃສ. ແມ່ເຖົ້າບຸນຫຼ້າວ່າ: ອ້າຍກັນວ່າກໍ່ໄປນໍາພວກເຈົ້າຫັ້ນແລ້ວ. ວ່າພວກເຈົ້າໄປໃສ ແຕ່ກ່ອນລາວກໍ່ໄປນໍາເຂົາ ຖາມອີກຄໍາເດ, ແມ່ເຖົ້າບຸນຫຼ້າວ່າ: ຄໍາຕາຍແລ້ວ, ເຂົາຕີແມ່ເຖົ້າບຸນຫຼ້າ ຕີເປັນຊຸດ ເປັນຊຸດເລີຍ.

ພວກສັດຕູຖາມວ່າ: ດຽວນີ້ເດໃຜເປັນຄະນະບ້ານ?. ແມ່ເຖົ້າບຸນຫຼ້າບໍ່ມີໃຜ, ເຂົາຖາມອີກ: ຄະນະຕາແສງເດໃຜເປັນຄັນຊັ້ນ? ເອົາກໍ່ນາຍບ້ານພຸ້ນຕາແສງປິດ. ເຂົາວ່ານັ້ນແມ່ນຄະນະບ້ານສັດຕູ ແມ່ເຖົ້າບຸນຫຼ້າວ່າ: ເອີພວກເຮົາມີຫັ້ນແລ້ວ ພວກເຮົາຈັດຕັ້ງ. ເຂົາວ່າ ໂອ່ຍເກັ່ງໃດ ອີ່ອັນນີ້! ເຂົາລະຕີອີກ, ທັງຕີທັງເຕະແລ້ວ. ແມ່ເຖົ້າບຸນຫຼ້າກໍ່ບໍ່ໄຫ້ບໍ່ອອກນໍ້າຕາ, ເພິ່ນບໍ່ຄິດ

ຢ້ານເລີຍ. ແຕ່ 4ໂມງ ເຊົ້າຮອດ 12ໂມງທ່ຽງ, ບັກຄຳຟອງທັ້ນຕີ, ຈັກໜ່ອຍນາຍມັນກໍ່ມາຮອດແລ້ວ ຮອດ 12ໂມງ ເຂົາຕີແມ່ເຖົ້າບຸນຫຼ້າ ຈົນເລືອດອອກທາງດັງ ທາງປາກ, ສຸດທ້າຍນາຍມັນກໍ່ມາແລ້ວ ແຕ່ບ້ານພຸ້ນ ແລະ ບອກຄຳຟອງວ່າ ເມືອງ ກິນເຂົ້າ. ຄັນນາຍເຂົາບໍ່ເຫັນທັ້ນ ມັນຕີ ແມ່ເຖົ້າ ບຸນຫຼ້າທັ້ນຕາຍຊື່ໆ. ໄດ້ຍິນຈັ່ງຊັ້ນ ແມ່ເຖົ້າບຸນຫຼ້າມີແຮງ. ບາດມັນເວົ້າແນວນັ້ນ, ບຸນຫຼ້າຄິດ ໃນໃຈວ່າ: ມັນບໍ່ຂ້າດອກມັນວ່າຕີ ກໍ່ຕາຍຊື່ໆ. ແມ່ເຖົ້າບຸນຫຼ້າກໍ່ເມືອແລ້ວ ກໍ່ກິນເຂົ້າ, ແມ່ເຖົ້າບຸນຫຼ້າບໍ່ເຂົ້າບ້ານ, ສັດຕູຈັບເດັກນ້ອຍມາອີກຜູ້ໜຶ່ງ, ມັນຈັບແລ້ວຜູ້ໃຫ່ຍສອງຄົນ, ແມ່ຍິງຜູ້ໜຶ່ງ ມັນຈັບຜູ້ຊາຍ ຜູ້ໜຶ່ງມັນຈັບທັ້ນ, ມັນຈັບແລ້ວຕີ, ຕີແລ້ວເຕະຈົນຂີ້ອອກ ຍ່ຽວອອກທັ້ນແລ້ວ. ມັນດຶງຜົມອີກ. ມັນຈັບແລ້ວກໍ່ປະພວກແມ່ເຖົ້າບຸນຫຼ້າຢູ່ນອກບ້ານ, ເຂົ້າກິນເຂົ້າແລ້ວກໍ່ໄປບ້ານດາກຈຶ່ງພຸ້ນ. ເວລາພວກເຂົາເອົາພວກແມ່ເຖົ້າບຸນຫຼ້າໄປ, ພວກມັນບໍ່ໄດ້ມັດຢ່າງເອງ, ແຕ່ເຂົາບໍ່ໃຫ້ພວກແມ່ເຖົ້າບຸນຫຼ້າ ຍ່າງນຳກັນ. ນີ້ຄືນໂທດຢ່າງຜູ້ໜຶ່ງ, ສັດຕູຢ່າງຜູ້ໜຶ່ງ, ສັດຕູເອົາ ພວກແມ່ເຖົ້າບຸນຫຼ້າ ໄປຮອດບ້ານດົງປ່ອຍຊະນະ, ລຸງຄຳຈັນແຕ່ກ່ອນ ບັກຄຳຟອງບໍ່ຮູ້ໃດ, ຄັນຮູ້ມັນຂ້າລຸງຄຳຈັນແລ້ວ. ລຸງຄຳຈັນອອກແຕ່ບ້ານໄປເບິ່ງຄວາຍ, ມັນຍາດປືນແຕ່ທະຫານ, ມັນຍິງ ປັ້ງ ໆ ໆ ແລ້ວແຕ່ບໍ່ຖືກ, ມັນບໍ່ຈັບລຸງຄຳຈັນເລີຍ ກໍ່ຖືວ່າຈັບປະຊາຊົນ, ມັນບໍ່ຮູ້ວ່າພະນັກງານ, ຄັນມັນຮູ້ລະຂ້າແລ້ວໄລຍະນັ້ນ.

ມັນຈັບລຸງຄຳຈັນຜູ້ໄປຫາຄວາຍນີ້, ລຸງຄຳຈັນເລຂາພັກເມືອງ, ພໍດີມັນປາບປະຊາຊົນອີກຢູ່ທັ້ນ. ພວກແມ່ເຖົ້າບຸນຫຼ້າກໍ່ຢູ່ກ້ອງຕະລ່າງແລ້ວ, ບໍ່ໄດ້ຂຶ້ນເຮືອນ. ປະຊາຊົນຕາແສງອີ, ຕາແສງອີທັ້ນ ແຕ່ກ່ອນທັ້ນ ມີຊື່ຕາແສງແລ້ວ. ແຕ່ຕາແສງອີແມ່ນໂຕນແຕ່ເທິງແລ້ວ, ຫຼັງຈາກນັ້ນທັ້ນ ໄລຍະຕອນຫຼັງມັນຂ້າລູກຕາແສງ, ຕາແສງໂຕນ, ແລ້ວຈຶ່ງຈັດຕັ້ງຕາແສງປິດອີກ. ຕາແສງສັດຕູແຕ່ກ່ອນໃຫ້ຂ້າຕາແສງອີທັ້ນ,ຂອງວ່າຊອກຫາເຂົາບໍ່ເຫັນຕີ,ເຂົາບໍ່ຢາກບອກໃຫ້ມັນ, ຂອງວ່າມັນ ໂຕນໜີ.

ຕາແສງອີທັ້ນມັນໂຕນລີ້ທາງລັບ, ໂຕນເຂົ້າປ່າ, ຂອງລູກມັນສັດຕູຂ້າເດຍູ່ປິດຈະອານນັ້ນ. ເຂົາຄຳຈັບທັ້ນລະເຂົາຈັບ, ເຂົາຕີ, ຕີທັ່ງໜ້າຜາກຈີນເລືອດອອກ, ພວກແມ່ເຖົ້າບຸນຫຼ້າຢູ່ທັ້ນ, ປະຊາຊິນເຂົາໄທ້, ເຂົາເບິ່ງແມ່ເຖົ້າບຸນຫຼ້າທັ້ນ. ຂອງແມ່ເຖົ້າບຸນຫຼ້າກໍ່ໄດ້ຢູ່ເມືອງແລ້ວເດໄລຍະນັ້ນ, ໃຜກໍ່ມາເບິ່ງເພິ່ນໃຜກໍ່ເອົາເຂົ້າ, ແກງເອົາຊີ້ນໄກ່ຊີ້ນປາມາໃຫ້ແລ້ວ. ແຕ່ໃຜຊິກິນໄດ້ຂອງພວກເພິ່ນຢູ່ນຳສັດຕູ, ພວກໝູ່ບໍ່ກິນແລ້ວ. ພໍດີ 7 ໂມງແລງພວກຍາມເມືອ, ເມືອແລ້ວຈຶ່ງກິນເຂົ້າ, ຢູ່ພີ້ກໍ່ສາມເທື່ອໄດ້ກິນ. ເຫຼືອຈາກເຂົາກິນເຂົາກໍ່ໃຫ້ກະດູກກະດ້ງວ ຊີ້ນປາ, ຊີ້ນໝູ, ຊີ້ນໄກ່ທັ້ນ, ແຕ່ບໍ່ມີໃຜກິນ 4 ຄົນພວກເພິ່ນທັ້ນ. ພວກເພິ່ນເມືອຄ່ຳແລ້ວ ແຕ່ກໍ່ໄປຄືກັນ. ພວກເພິ່ນໄປພໍດີ ຮອດຫ້ວຍຢູ່ດົງ, ແມ່ເຖົ້າບຸນຫຼ້າພັດຖືກກັບອາວຍອນທັ້ນ, ແມ່ເຖົ້າບຸນຫຼ້າຢາກລົມກັບອາວຍອນ, ອາວຍອນພັດມາຈັບມືແມ່ເຖົ້າບຸນຫຼ້າແນວນີ້. ອາວຍອນກໍ່ຖາມແມ່ເຖົ້າບຸນຫຼ້າແມ່ນໃຜ?, ແມ່ເຖົ້າບຸນຫຼ້າຕອບວ່າ ຂ້ອຍບຸນຫຼ້າ ເວົ້າຄ່ອຍໆເດ (ອາວຍອນແມ່ນອາວຂອງແມ່ເຖົ້າບຸນຫຼ້າ).

ບໍ່ເຫັນກັນເດມືດກາງຄືນ. ອາວຍອນວ່າດຽວນີ້ທັ້ນເຂົາຊິເອົາໄປຮອດປາກເຊໃດ ແມ່ເຖົ້າບຸນຫຼ້າວ່າ: ບໍ່ໄປອາວຍອນວ່າເຈົ້າບໍ່ໄປມັນຊິຂ້າເຈົ້າ, ແມ່ເຖົ້າບຸນຫຼ້າວ່າ: ຂ້າກໍ່ຂ້າຢູ່ບ້ານທັ້ນແລ້ວ, ບໍ່ໄປເດັດຂາດ ແມ່ເຖົ້າບຸນຫຼ້າເວົ້າວ່າ: ຂ້າກໍ່ຊິໃຫ້ປະຊາຊິນເບິ່ງຢູ່ບ້ານທັ້ນແຫລະເພິ່ນວ່າ, ຢູ່ພຸ້ນ ປະຊາຊິນບໍ່ເຫັນ. ພໍດີອາວຍອນພັດວ່າ ເອດຽວນີ້ແນວນີ້ເດີ, ເຈົ້າຕັດສິນໃຈບໍ່ໄປ, ແນ່ນອນ ພວກເຮົາຕ້ອງຂ້າເຈົ້າ, ເຈົ້າຮູ້ຕີ ແຄມປ່າຊ້າກາງ ເຂົາຊິຂ້າຊິຍິງທັ້ນ! ຮູ້ແມ່ເຖົ້າບຸນຫຼ້າວ່າ, ອາວຍອນວ່າ ຄັນເຂົາວ່າຊິຍິງ "ເຂົາເອົາປືນເອົາຫຍັງທັ້ນເຈົ້າໜີເຈົ້າຕ້ອງແລ່ນ, ເຈົ້າແລ່ນມາ ມັນຍິງເຈົ້າບາດດຽວໂລດ: ຄັນເຈົ້າຍັງຢູ່ທັ້ນ, ຄັນເຈົ້າຍັງຊິຢູ່ສູ້ຢູ່ທັ້ນ ຈັກໜ່ອຍມັນຈັບ ມັນເຮັດຄື ຢູ່ເລົ່າງານທັ້ນ. ມັນຈອນປາກຈອນໂຕຈອນຕີນ, ມັນເອົາໝາກເພັດໝາກພາຍທັ້ນທາ, ສຸດທ້າຍປະຊາຊິນເຫັນມັນທາລຸນເຈົ້າທັ້ນ, ຄັນວ່າເຂົາຊິຂ້າເຈົ້າ", ຂອງມັນບໍ່ມັດ ແມ່ເຖົ້າບຸນຫຼ້າວ່າ: ໄດ້ພໍດີເພິ່ນເມືອ, ມັນເຫັນເພິ່ນທັ້ນອີກໂຕນ້ອຍໆ ອາວຍອນ

ວ່າ "ຫັ້ນແລ້ວຂ້ອຍວ່າເດັດ ກໍ່ຍັງບໍ່ທັນເດັດ. ອາວຍອນເວົ້າກັບເພິ່ນຫັ້ນ, ໃຜ ມ້ຽນໄຫລະສັບຫັ້ນ? ແມ່ນເຈົ້າມ້ຽນ, ເຈົ້າໄປມ້ຽນແມ່ນບໍ? ບໍ່ ເພິ່ນວ່າມີແຕ່ ບາເຢີນເພິ່ນວ່າແນວນັ້ນ. ບາເຢີນຫັ້ນໄປມ້ຽນ ພໍດີຈຸບ້ານດາກລານຫັ້ນ, ຂອງ ບ້ານດາກລານເປັນໄມ້ມືຂອງສັດຕູເດ, ເຖົ້ານັ້ນເຂົາກໍໄດ້ວ່າບາເຢີນຫັ້ນ. ມື້ ອື່ນຫັ້ນມັນປາບ ບາເຢີນຫັ້ນບໍ່ແມ່ນງ່າຍ. ພໍດີພວກມັນເມືອຮອດບ້ານ ປະພວກ ແມ່ເຖົ້າບຸນຫຼ້າຢູ່ນອກ, ທະຫານສັດຕູເຂົ້າໝົດ, ມີແຕ່ຈຸດາກລານຫັ້ນແລ້ວ ຢູ່ນອກ, ເບິ່ງເຂົາຍິງປືນ ປືກໆ ຢູ່ບ້ານຫັ້ນ ເຂົາອ້ອມບ້ານຫັ້ນ. ລະແມ່ເຖົ້າ ບຸນຫຼ້າຫັ້ນວ່າ: ໂອ່ຍ ຢ່ານໍາ ຢ່າເຂົ້າຂ້າງມັນໜາວ່າຊັ້ນ ພໍດີໄທບ້ານ ດາກ ລານວ່າ ເຈົ້າຢານມັນຫວະ? ຢ້ານຫັ້ນແຫລະ! ຢ້ານມັນຂ້າປະຊາຊົນ! ໄທ ບ້ານ ດາກລານ ວ່າ:ເຂົາບໍ່ຂ້າດອກ, ເຂົາປາບຊື່ໆ, ເຈົ້າຢ່າປົບເດີ! ຄັນເຈົ້າ ປົບຫັ້ນມັນຂ້າເຈົ້າອີ່ຫຼີ, ແມ່ເຖົ້າບຸນຫຼ້າ ກໍ່ມີແຮງອີກ ອັນນັ້ນ. ແມ່ເຖົ້າ ບຸນຫຼ້າ ຄິດແນວໃດ ກໍ່ເລື່ອງປາບຫັ້ນ ມັນປາບໝົດຄືນແຫລ້ວ, ພວກດາກລານ ເວົ້າ: ມັນຕີເຈົ້າຫັ້ນ, ແຕ່ວ່າຄັນເຈົ້າບໍ່ເຫັນຫຍັງກໍ່ຄືຊິແມ່ນຈຸນັ້ນກໍ່ອີ່ດູຕົບເຈົ້າ, ຄັນເຈົ້າ ບໍ່ເຫັນອີ່ສັງກໍ່ຈັກເຈົ້າຊິບອກອີ່ສັງ. ພວກດາກລານວ່າ: ກໍ່ບໍ່ບອກຄັນເຈົ້າບອກ ບາງທີເຈົ້າບອກ ບໍ່ຖືກ ມັນແຮງຊິປາບພວກເຈົ້າອີກ. ແມ່ເຖົ້າບຸນຫຼ້າກໍ່ມີແຮງ ແດ່, ຈົນແລ້ວເຂົາປາບຢູ່ບ້ານຫັ້ນ ເຮັດໃຫ້ພວກເພິ່ນເຂົ້າບ້ານເຂົ້າເຮືອນ ຫັ້ນບໍ່ໄດ້, ຈຸສາມຄືນຫັ້ນເຂົ້າເຮືອນແລ້ວ, ຍັງແຕ່ແມ່ເຖົ້າບຸນຫຼ້າຫັ້ນແລ້ວຢູ່ ນອກ, ເຂົາຈັບເລີຍ,ເຂົາຈັບມັດຕີ,ເຂົາຈັບແມ່ເຖົ້າບຸນຫຼ້າແລ້ວຕີ ແລ້ວກໍ່ມັດຢູ່ ນັ້ນ. ຢູ່ຫຼັກຄວາຍຫັ້ນ, ບ່ອນຫຼັກຄວາຍຢູ່ຕໍ່ໜ້າບ້ານຫັ້ນເດ.

ສັດຕູມັດແຂນແມ່ເຖົ້າບຸນຫຼ້າໃສ່ຫຼັກ, ມັດໃຫ້ເພິ່ນກອດຫຼັກຄວາຍຢູ່ ແລ້ວກໍ່ຕີ, ບໍ່ແມ່ນມັດແໜ້ນ, ຈັກໜ່ອຍເຂົາກໍ່ປ່ອຍແມ່ເຖົ້າບຸນຫຼ້າ ເອົາອອກ ເຊືອກຫັ້ນ, ແມ່ເຖົ້າບຸນຫຼ້າກໍ່ໄປຫາງບ່ອນເຂົາຕີ ເພິ່ນແຕ່ເຊົ້າໆ, ສັດຕູກໍ່ຫຼາຍ ຄືນໄປ,ບໍ່ມີແຕ່ບັກຄໍາຟອງ, ເຂົາໄປກໍ່ຖາມແບບຕອນເຊົ້າຫັ້ນແລ້ວ. ເຂົາຖາມ ອ້າຍກັນຖາມໄທລະເລກຫັ້ນ, ບໍ່ເຫັນກໍ່ເມືອ,ເຂົາຕີອີກຢູ່ຫັ້ນ, ຈັກໜ່ອຍກໍ່ໄປ ທາງນັ້ນອີກ ກໍ່ຖາມອັນນັ້ນແລ້ວ. ເຈົ້າບໍ່ບອກເດັດຂາດ ເຈົ້າຕາຍມັນວ່າ.

ມັນໄປແຈບ້ານນັ້ນແຈບ້ານນີ້ຖາມ. ແມ່ເຖົ້າບຸນຫຼ້າວ່າ: ເອີຕາຍກໍ່ຕາຍ ຫັ້ນແຫລະ, ເພິ່ນບໍ່ບອກ, ຈັກຊິໃຫ້ບອກອີສັງ. ແມ່ເຖົ້າບຸນຫຼ້າເພິ່ນວ່າ: "ຂ້ອຍ ມີແຕ່ດ້ານມິດດ້ານພ້າຫັ້ນແຫລະ ຂ້ອຍຈັບໄປ, ໂຫລະເລກຂ້ອຍບໍ່ໄດ້ເຫັນ ຂ້ອຍບໍ່ໄດ້ຈັບ". ພໍດີຮອດ 3ໂມງ ມັນຕີແມ່ເຖົ້າບຸນຫຼ້າຕີແທ້ຕີວ່າ ຕີຈົນຂີ້ອອກ ຍ່ຽວອອກ, ເລືອດຫັ້ນບໍ່ໃຫ້ເວົ້າ, ຕາຍຄືນແຫລະຢູ່ຫັ້ນ, ຈົນນາຍມັນບອກ ໃຫ້ເຊົາ: ເຊົາ ຢ່າຕີ ຈັກໜ່ອຍປະຊາຊົນຕາຍລ້າໆ. ບາດເຂົາເມືອແລ້ວຂອງ ຈຸແມ່ຍິງຫັ້ນເຂົາເຕົ້າໂຮມໝົດ, ຜູ້ຊາຍ ຢູ່ເຮືອນອ້າຍກັນຫັ້ນໝົດ, ແມ່ຍິງຫັ້ນຢູ່ ເຮືອນຂອງແມ່ເຖົ້າບຸນຫຼ້າ, ຈຸແມ່ຍິງຫັ້ນຈຶ່ງໂຈມເອົາເພິ່ນ ເມືອຕົ້ມນຳຕົ້ມເຂົ້າ ປຽກໂຈ້ໃຫ້ກິນ, ໃຜຊິກິນໄດ້.ອັນນັ້ນໄລຍະສັດຕູປາບບຸນຫຼ້າເປັນຄືແນວນັ້ນ.

ແປວ່າມັນຕີແມ່ເຖົ້າບຸນຫຼ້າເຈັບຈົນບໍ່ຮູ້ເມື່ອ ແລ້ວມັນໜີເມືອເລີຍ ມັນກໍ່ ໜີແຫລ້ວ, ຂອງນາຍມັນໃຫ້ໜີ, ນາຍມັນໃຫ້ເມືອບໍ່ໃຫ້ເຮັດ, ບໍ່ໃຫ້ຕີຈັກໜ່ອຍ ແມ່ເຖົ້າບຸນຫຼ້າຕາຍມັນວ່າ, ຕອນເຊົ້າກໍ່ເຮັດໝົດບ້ານແຫລະປະຊາຊົນຫັ້ນ, ເຢັນກໍ່ຢູ່ບ່ອນເຂົາໂຮມຫັ້ນແລ້ວ. ປະຊາຊົນຫັ້ນພວກຜູ້ຊາຍເຂົາໃຫ້ລວມ, ແມ່ ຍິງຫັ້ນເຂົາບໍ່ໃຫ້ລວມນຳ. ສັດຕູຖາມແຕ່ລະຄືນແຕ່ລະຄືນ, ພໍດີຮອດເຢັນ, ເຢັນຫັ້ນ ຄືນນ້ອຍໆ ຈັກອາຍຸແມ່ນໄດ້ບໍ 8 -9 ປີ,ຮອດພວກດາກລານແລ້ວ, ເຢັນຫັ້ນເວົ້າຄືນນີ້ ພວກເພິ່ນເອົາໄປໄວ້. ເຂົາເອົາເຊືອກມັດໃສ່ຕີນໝໍຫ້ອຍ ໃສ່ກົກໄມ້. ສັດຕູຖາມໝໍນັ້ນກໍ່ບໍ່ບອກ, ແຕ່ວ່າໝໍແລ້ວ ເອົາໄປໄວ້. ແຕ່ບໍ່ບອກ, ໝໍວ່າເຮົາບໍ່ໄດ້ເອົາໄປໄວ້. ຂອງໝໍມັນໄດຍິນແມ່ເຖົ້າບຸນຫຼ້າເວົ້າແນວນັ້ນ. ສຸດ ທ້າຍເຂົາເຈົ້າຕີປະຊາຊົນ ສາມບາດ ສາມບາດ ສາມບາດ, ໂຕນາຍມັນ ຫັ້ນແຫລະຕີ, ບໍ່ແມ່ນຄຳຟອງຕີ. ຫຼັງຈາກນັ້ນອາວຍອນກໍ່ເວົ້າອີກ, ລາວວ່າ ພວກເຈົ້າບອກ. ຄັນວ່າບໍ່ບອກສັດຕູ ຂ້າພະນັກງານເຮົາໝົດ, ມັນເຮັດຄືຢູ່ ເລົ່າງານແຕ່ກ່ອນຫັ້ນມັນປາບພະນັກງານ.ພໍດີແມ່ເຖົ້າບຸນຫຼ້າຍິນ, ຂອງເຂົາເວົ້າ ແຮງມັນກໍ່ໄກກັບເຮືອນແມ່ເຖົ້າບຸນຫຼ້າຫັ້ນ. ພໍດີແມ່ເຖົ້າບຸນຫຼ້າພໍອອກມາ, ເຂົາ ເຈົ້າຫັ້ນ ໄປຖ່າຍໜັກ. ພໍດີແມ່ເຖົ້າບຸນຫຼ້າ ບອກອ້າຍເພິ່ນມາ ອ້າຍເພິ່ນກໍ່ມາ ແຫລະເນາະ. ສັດກໍ່ໄປນຳ, ບໍ່ແມ່ນຄືນບ້ານດາກຈະວານ ໄປນຳມັນຮູ້ພວກ

ແມ່ເຖົ້າບຸນຫຼ້າດາກຈະວານຫັ້ນ ບໍ່ໄດ້ໄປທັງມວນ. ແມ່ເຖົ້າບຸນຫຼ້າວ່າຢ່າຊູ່ບອກເດີ, ໜ້ອຍກໍ່ບໍ່ໃຫ້ບອກ, ອັນໜຶ່ງກໍ່ບໍ່ໃຫ້ບອກ, ອັນສອງກໍ່ບໍ່ໃຫ້ບອກເດັດຂາດ, ບອກຕາຍໂລດ.

ແມ່ເຖົ້າບຸນຫຼ້າເວົ້າເປັນພາສາເພິ່ນເອງເວົ້ານຳອ້າຍເພິ່ນ: ຢ່າຊູ່ບອກເດີວ່າເພິ່ນ ຕາຍໝົດບ້ານເຮົາ. ໂຫລະເລກກໍ່ບໍ່ແມ່ນວ່າມີແຕ່ຈຸຄຳຟອງ, ຈຸລຸງຄຳສຸກເອົາໄວ້, ນຳຫຼັງກໍ່ແມ່ນອ້າຍນ້ອງ ເພື່ອນອີກເອົາໄວ້, ບາງທີບອກບໍ່ຖືກໂຕ, ຂອງຄຳຟອງໃຊ້ກໍ່ເວນອີກແຫລະ. ລາວວ່າບໍ່ບອກດອກ ສັດຕູວ່າແມ່ນຫຍັງ? ອ້າຍຂອງແມ່ເຖົ້າບຸນຫຼ້າບໍ່ມີອີ່ຫຍັງ, ລາວເຈັບຖ່າຍໜັກກໍ່ບໍ່ໄດ້ຖ່າຍເບົາ ກໍ່ບໍ່ໄດ້, ບາດນີ້ຫຼັງຈາກເຂົາຕີແລ້ວເຂົາກໍ່ຈັບພໍ່ອ້າຍກັນອີກ, ຈັບພໍ່ອ້າຍກັນຫັ້ນໄປປາບຢູ່ບ່ອນ ເຂົາຕີແມ່ເຖົ້າບຸນຫຼ້າຫັ້ນແລ້ວ. ສັດຕູປາບຍິງ, ຖາມລູກມັນຢູ່ໃສລູກມຶງຫັ້ນ, ພໍ່ອ້າຍກັນວ່າ ລູກລາວກໍ່ໄປນຳພວກເຈົ້າຫັ້ນແລ້ວ, ພວກເຈົ້າເຮັດແນວໃດມັນກໍ່ເສຍຍ້ອນກໍ່ເຈົ້າເຮັດ. ເບິ່ງມັນຍິງເບື້ອງນີ້ສາມລູກ, ເບື້ອງນັ້ນສາມລູກ. ປືນຈັກປືນອີ່ສັງປືນເປັນຍາວຫັ້ນ, ແຕ່ເທິງຫັ້ນ ເຂົາລາກພໍ່ເຖົ້າຮອດຖະໜົນ, ແລ້ວໃຫ້ລາວນອນ, ນອນແລ້ວກໍ່ປົກແຕ່ຫົວສຸດຕີນ, ແລ້ວກໍ່ເອົາໝາກຈັບມັນຕີ້ນ ປະຢູ່ບ່ອນຫົວລາວຫັ້ນ. ຜູ້ດຽວຄຳຟອງເຮັດບໍ່ແມ່ນຜູ້ອື່ນ, ທະຫານບໍ່ໄດ້ໄປນຳ, ມັນຍິງສາມລູກ ແຕ່ຫັ້ນມັນຍິງແລ້ວພໍ່ກັນຫັ້ນເມືອພວກເຮົາ! ມັນວ່າ. ແລ້ວມັນກໍ່ເມືອເລີຍ, 8ໂມງເຊົ້າມັນກໍ່ເມືອ. ເຂົາຢູ່ບ້ານຫັ້ນສາມຄືນພໍ່ກັນຫັ້ນບໍ່ຕາຍ,ມັນຍິງປາບຊື່ໆ, ມັນຊູ່ຊື່ໆ, ມັນຕົວະ. ບັກຄຳຟອງນີ້ເປັນ ຄົນຍິງ, ຫາກຄວາມຈິງມັນຂີ້ຕົວະ, ມັນວ່າມັນຍິງພວກປ້າບຸນຫຼ້າ, ແຕ່ສຸດທ້າຍມັນບໍ່ໄດ້ຍິງມັນຕົວະນາຍມັນຊື່ໆ. ມັນຮູ້ແລ້ວຄັນມັນຍິງມັນກໍ່ຕາຍຄືກັນ, ເຂົາຈະຍິງມັນ, ເຂົາບໍ່ໄດ້ອີສັງ. ສຸດທ້າຍທ້າວຄຳຟອງດຽວນີ້ມັນກໍ່ຕາຍແລ້ວ ເຂົາວ່າມັນເຂົ້າຄຸກເຂົາວ່າ, ມາແຕ່ຫັ້ນມັນເຂົ້າຄຸກມັນຕາຍຍ້ອນມັນເຈັບທ້ອງ. ມັນຕາຍເຈັບທ້ອງມັນບາບເພິ່ນວ່າ. ບັດນີ້ທ້າວແອນ້ອຍຜູ້ເວົ້າຫວ່າງກີ້ນີ້ແມ່ນທ້າວບຸນ. ລາວກໍ່ບໍ່ຕາຍດຽວນີ້ຍັງຢູ່ບ້ານຕອງນີ້. ລາວຢູ່ບ້ານຕອງ, ດຽວນີ້ລາວກໍ່ເຖົ້າແລ້ວ, ຄືນແຈ້ຄືນເຕ້ຍ. ເອື້ອຍມັນແຮງເຕ້ຍ ແນວນັ້ນເຫດຜົນມັນຫັ້ນ.

ໃນເວລາທີ່ເຂົາທາລຸນແມ່ເຖົ້າບຸນຫຼ້າ, ເຂົາປາບແນວນັ້ນແລ້ວ, ຫຼັງຈາກທີ່ວ່າພິດອັນນັ້ນແລ້ວ, ແມ່ເຖົ້າບຸນຫຼ້າກໍ່ເຂົ້າຮ່ວມການຕໍ່ສູ້ເລີຍ, ເພິ່ນໄປເລີຍ, ບໍ່ເມືອບ້ານອີກບໍ່ເມືອເຮັດວຽກຢູ່ບ້ານເພິ່ນ, ສະຫຼະບໍ່ເອົາລູກເອົາຜົວເລີຍ, ລາຄອບຄົວເລີຍ. ເຂົ້າໄປເຄື່ອນໄຫວລັບເລີຍ.

ເພິ່ນບໍ່ເອົາຜົວ ຍ້ອນອີ່ສັງ ? ຍ້ອນບໍ່ມີຜູ້ບໍ່ມີຜູ້ງາມນັກ ມີແຕ່ຜູ້ຂີ້ລ້າຍສໍ່າໂຕນັກ. ແຕ່ວ່າແມ່ເຖົ້າບຸນຫຼ້ານີ້ແນວນີ້, ເພິ່ນເຮັດວຽກເຮັດງານແຕ່ຢູ່ເມືອງພຸ້ນ, ແຕ່ກ່ອນກໍ່ສ້າງພະນັກງານຫຼາຍຄົນຫັ້ນແລ້ວ. ຢູ່ຊົນເຜົ່າພວກເພິ່ນມັນຍາກແຕ່ກ່ອນ. ຊົນເຜົ່າເພິ່ນແຕ່ກ່ອນຍາກ,ສ້າງພະນັກງານຍາກ ຈົນມີພວກທີ່ຂຶ້ນເຕົ້າໂຮມການສ້າງພະນັກງານໄດ້ແລ້ວ. ເພິ່ນນີ້ບໍ່ໄດ້ໄປຂຶ້ນເຕົ້າໂຮມ, ເພິ່ນຢູ່ຫ້ອງການສອງເດືອນສາມເດືອນກໍ່ເຮັດວຽກ, ເພິ່ນບໍ່ເອົາຜົວແລ້ວ, ຖ້າວ່າເອົາຜົວກໍ່ມີລູກ, ມີລູກກໍ່ເຄື່ອນໄຫວບໍ່ໄດ້.

ເພິ່ນກໍ່ຄິດໃນໃຈແມ່ນແມ່ຍິງ,ແມ່ຍິງຢູ່ນໍາບ້ານພວກເຮົາກໍ່ເປັນຊົນເຜົ່າອັນໜຶ່ງທີ່ຖືກການກົດຂີ່ຂູດຮີດ, ແລະຍັງເລື່ອງຮັກສານັບຖືຮີດຄອງ ປະເພນີອີກ. ແຕ່ກ່ອນລະແມ່ນເລື່ອງພວກເພິ່ນຫັ້ນລະໜັກໜ່ວງກ່ອນໝູ່, ກວ່າລາວລຸ່ມ. ຄັນເວົ້າລວມ. ກໍ່ຄິດໃນໃຈ, ກໍ່ຈິນຈຸນາງພູວັນນີ້, ລຸງຊົມຊື່ນພໍ່ຮັກເພິ່ນລູກເຮັດວຽກດີ, ເຮັດລະຕ້ອງຄະລໍາແນວນັ້ນອີກ. ຈັກຄະລໍາອີ່ຫຍັງເພິ່ນວ່າ, ຄະລໍາອີ່ຫຍັງ, ຄະລໍາໃດພໍ່ຮັກເພິ່ນວ່າ, ບໍ່ໃຫ້ພົວພັນກັບຜູ້ຊາຍ ພໍ່ເພິ່ນວ່າແນວນັ້ນ. ພໍ່ຮັກເພິ່ນວ່າຄັນເຈົ້າພົວພັນ ກັບຜູ້ຊາຍລະແມ່ນວ່າເຈົ້າຢາກໄດ້ໃຜ ມື້ນີ້ເຈົ້າຢາກໄປອີກ, ມື້ອື່ນເຈົ້າຢາກໄປອີກ, ເອນໍ່າ ເພິ່ນວ່າໄດ້ນໍ່າ. ເພິ່ນວ່າດຽວນີ້ພໍ່ຮັກເພິ່ນວ່າ ແມ່ນວ່າຢາກສ້າງເຈົ້າໃຫ້ເປັນພະນັກງານ, ບ້ານເຮົາເມືອງເຮົາທຸກຍາກແລ້ວ ຍ້ອນຖືກການກົດຂີ່ຂູດຮີດຄືເຂົາເວົ້າຫັ້ນແຫລະ, ແມ່ຍິງໜັກກວ່າຜູ້ຊາຍ, ພໍ່ຮັກເພິ່ນວ່າ: ຄັນໂຕເອົາຜົວຫັ້ນ ຈັກໜ່ອຍໂຕເອົາມີລູກ, ໂຕເຄື່ອນໄຫວບໍ່ໄດ້. ແມ່ເຖົ້າບຸນຫຼ້າຄິດໃນໃຈ ເພິ່ນວ່າແມ່ນແທ້. ເພິ່ນກໍ່ຄິດໃນໃຈວ່າເຮົາກໍ່ຄົນໜຶ່ງເປັນແມ່ຍິງ, ເຮົາກໍ່ຜູ້ໜຶ່ງຜ່ານການກົດຂີ່ຂູດຮີດ. ແມ່ຍິງນີ້ຖືກສາມແອກ: ແອກຈັກກະພັດ, ແອກສັກດີນາ, ແອກຜູ້ຊາຍນີ້ວ່າ ໂອ້! ຄັນແນວ

ນັ້ນກໍ່ໜັກແລ້ວ ສາມແອກຫັ້ນ ໃຜຊິຮັບໄດ້ເພິ່ນວ່າ. ຢູ່ກໍ່ຢູ່ເພິ່ນວ່າ, ເພິ່ນວ່າຄັນເຮົາຢູ່ເດ, ຄັນເຮົາເຖົ້າເດ ບໍ່ມີລູກຫັ້ນໃຜຊິລ້ຽງເຮົາ. ລັດບໍ່ປະເຂົາວ່າ, ໝູ່ເພິ່ນວ່າລັດບໍ່ມີເວລາໃດເອກະລາດໃຫ້ເຈົ້າເອົາຜົວໝູ່ວ່າ. ແມ່ເຖົ້າບຸນຫຼ້າວ່າ: ຮ້ວາຍໄດ້ໄປເອກະລາດຂ້ອຍເຖົ້າແລ້ວຂ້ອຍຊິຕ້ອງການອິສັງ, ຢູ່ແຕ່ເປັນຄູ່ຊື່ໆແລ້ວຄູ່ຜົວເມຍ. ແຕ່ເພິ່ນຄິດໃນໃຈວ່າ: "ແຕ່ເຮົານີ້ມັນເຄີຍແລ້ວ, ຢູ່ແນວນັ້ນ, ຂ້ອຍບໍ່ຄິດເລີຍ ຄັນຂ້ອຍເອົາຜົວຂ້ອຍກໍ່ຕ້ອງມີລູກ, ໄປເຄື່ອນໄຫວບໍ່ໄດ້, ບໍ່ຈັກບ່າໄລບໍ່ຈັກໄຖ່ເຂົ້າບໍ່ຈັກບີ່ດຶງນ້ຳບໍ່ຈັກລູກ. ສັດຕູທາງດິນ, ສັດຕູທາງອາກາດອີກໄປບໍ່ລອດແທ້". ເພິ່ນວ່າບໍ່ເອົາຫັ້ນແລ້ວຜົວ. ໝູ່ວ່າ ເຮົາເລືອກ, ບໍ່ແມ່ນເຮົາເລືອກແນວຄິດແນວນັ້ນ. ເພິ່ນຕັດສິນໃຈບໍ່ເອົາແລ້ວເອົາປະຊາຊົນເພາະເຂົາປານລູກເຮົາໃຜກໍ່ຮັກຫອມເຮົາຄືລູກ ຄືຫຼານເຮົາຫັ້ນແລ້ວ ແມ່ເຖົ້າບຸນຫຼ້າເຮັດການປະຕິວັດແຕ່ເພິ່ນຢູ່ພຸ້ນບໍ່ເຄີຍມີໃຜຕຳນິເພິ່ນ, ບໍ່ມີໃຜສຳຫຼວດເພິ່ນ, ສະນັ້ນເພິ່ນຄິດດີສໍ່ານັ້ນ, ເພິ່ນກໍ່ຍ້ອງເພິ່ນເອງເພິ່ນໄດ້ໄປເຮັດວຽກເຮັດງານ, ເພິ່ນໄດ້ໄປຮໍ່າຮຽນ, ເພິ່ນໄປຫວຽດນາມສາມເທື່ອ, ໄປຮຽນຢູ່ຫວຽດນາມ, ເພິ່ນໄດ້ຮຽນທິດສະດີຊັ້ນກາງເທື່ອໜຶ່ງ, ເພິ່ນໄດ້ຮຽນວຽກສະຫະພັນແມ່ຍິງ ຊັ້ນກາງເທື່ອໜຶ່ງມີແຕ່ປີຫົກເດືອນ, ເພິ່ນໄດ້ຮຽນທິດສະດີຊັ້ນສູງເທື່ອໜຶ່ງ. ເພິ່ນພົບຫຼາຍຄືນຢູ່, ບໍ່ເຫັນມີໃຜເວົ້າອີ່ສັງໃຫ້ເພິ່ນ, ມີແຕ່ເວົ້າເລື່ອງຄວາມທຸກຄວາມຍາກ, ເວົ້າເລື່ອງການເຄື່ອນໄຫວຂອງເພິ່ນ. ແຕ່ກ່ອນໃຜກໍ່ເວົ້າເພິ່ນວ່າ ໂອ້! ເຈົ້າກໍ່ເກັ່ງເນາະ ເກັ່ງກວ່າຜູ້ຊາຍເຂົາວ່າ, ສັດຕູເຮັດໃຫ້ເຈົ້າປານນັ້ນເຈົ້າກໍ່ເດັດດ່ຽວ. ເພິ່ນນີ້ບໍ່ເວົ້າແຫລະເລື່ອງເດັດ, ເວົ້າເດັດກໍ່ແມ່ນວ່າເພິ່ນຄິດເລື່ອງແນວຄິດຈິດໃຈຂອງເພິ່ນ. ເພິ່ນເຮັດວຽກເຮັດງານແມ່ນ ເພິ່ນຮັບຜິດຊອບຊາຕາກຳຂອງປະຊາຊົນ ຄັນເພິ່ນເຮັດບໍ່ສຳເລັດ. ເພິ່ນເຮັດບໍ່ແລ້ວ. ເພິ່ນເຮັດບໍ່ສຸກກົກສຸດປາຍຫັ້ນປະຊາຊົນກໍ່ຊິບໍ່ເຊື່ອໝັ້ນເພິ່ນຄິດໃນໃຈ. ເພິ່ນວ່າອັນນັ້ນ ຄືໄລຍະຂອງພວກເພິ່ນຢູ່ຕາເວັນອອກ ແຕ່ກ່ອນຫັ້ນສັດຕູຍິງທຳລາຍ, ຍິງຈົນມັນທົ່ວສຳນັກພວກເພິ່ນໄລຍະນັ້ນຫັ້ນ, ເພິ່ນຮັບຜິດຊອບສອງວຽກ ຊາວໜຸ່ມແມ່ຍິງ, ໄລຍະນັ້ນເພິ່ນໄປ ເຄື່ອນໄຫວດາກຈຶ່ງ. ທາງຊານໄຊ. ໄປທາງກະລຶມ

ມີແຕ່ຜ່ານຍິນຜ່ານອີ່ສັງ. ທັ້ນແລ້ວການເຄື່ອນໄຫວຂອງເພິ່ນສຸດທ້າຍ ທີ່ນັ້ນແຫລະເພິ່ນໄປທັ້ນ.

ເວລາເພິ່ນເຄື່ອນໄຫວທັ້ນແມ່ນວ່າທຳອິດ ເພິ່ນວ່າເປັນພວກຂົນຂວາຍແມ່ຍິງ, ຂົນຂວາຍກອງຫຼອນ ເຖິງວ່າເພິ່ນຊິຂີ້ລ້າຍແນວນີ້, ເພິ່ນເປັນຫົວໜ້າໜ່ວຍ ສິລະປະຍຸວະນາລີ ແຕ່ກ່ອນທັ້ນ ຢູ່ທິວຕາແສງດາກດຶມທັ້ນ. ລຽງລວງ ແມ່ນວ່າເພິ່ນເຮັດວຽກແນວນັ້ນ. ຈາກນັ້ນອີກແມ່ນວ່າເວລາເພິ່ນຢູ່ແຂວງປີ 63 ເພິ່ນໄດ້ເຂົ້າ ຄະນະພັກເມືອງ, ເຂົ້າຄະນະພັກແຂວງ ເພິ່ນກໍ່ເຮັດວຽກຊາວໜຸ່ມແນ່ ເຮັດວຽກແມ່ຍິງແດ່ ເຮັດວຽກຂົນຂວາຍທະຫານແດ່, ເວລາປົດປ່ອຍໜອງບົວເພິ່ນກໍ່ໄປເຄື່ອນໄຫວແຕ່ກ່ອນ.

ເວົ້າລວມແລ້ວຄືເຂົາສະເໜີ, ແຕ່ກ່ອນທັ້ນໄລຍະພວກເພິ່ນຢູ່ບ້ານທັ້ນເຂົາກໍ່ຕິກລິງແລ້ວເດ ເຂົາວ່າບ້ານເພິ່ນເປັນວິລະຊົນ. ຈັກແນວໃດເພິ່ນເວົ້າກັບພໍ່ຄຳບົນ, ເພາະວ່ານາຍບ້ານທັ້ນໄດ້ ເພາະວ່າໝົດຈັກອີ່ສັງແນ່ເພິ່ນໄດ້, ດຽວນີ້ ເຂົາໃຫ້ແມ່ເຖົ້າບຸນຫຼ້າ ສະເໜີອີກ, ອັນນັ້ນເພິ່ນກໍ່ຂຽນປີກາຍ, ຂຽນປະຫວັດເຂົາວ່າໃຫ້ເພິ່ນທັ້ນເຂົ້າວິລະຊົນ, ເຂົາວ່າຄັນເພິ່ນທັ້ນບໍ່ໄດ້ວິລະຊົນເຂົາວ່າ. ແມ່ເຖົ້າບຸນຫຼ້າຮອດດຽວນີ້ກໍ່ບໍ່ທັນເຫັນອີ່ສັງເຂົາເວົ້າ. ແຕ່ດຽວນີ້ທັ້ນແມ່ນວ່າຮອດເພິ່ນໄປເຮັດວຽກສາລະວັນແລ້ວ ກໍ່ກັບຄືນເຊກອງນີ້, ເພິ່ນກໍ່ເຮັດວຽກຢູ່ນີ້, ມີແຕ່ເຮັດວຽກ ແມ່ຍິງ ທັງຊາວໜຸ່ມ, ແນວໂຮມ ພວກເພິ່ນເຮັດນຳກັນທັ້ນແລ້ວ,ນີ້ເພິ່ນກັບວິໄລນີ້ ແຕ່ກ່ອນກໍ່ຢູ່ນຳກັນ, ລາວຢູ່ຊາວໜຸ່ມ, ຄະນະປະຈຳແນວໂຮມກໍ່ໄດ້ເຂົ້າ, ສະພາກໍ່ໄດ້ເຂົ້າເວລາຢູ່ຕາເວັນອອກ (ເບື້ອງຕົ້ນ), ນຳຫຼັງທັ້ນ, ແຕ່ລຸງຄຳບົນ ຍັງເຮັດນຳຫຼັງ ແມ່ເຖົ້າບຸນຫຼ້າ ດຽວນີ້ແມ່ເຖົ້າບຸນຫຼ້າບໍ່ສາມາດເຮັດຫຼາຍວຽກໄດ້ ເພາະເຖົ້າແກ່ແລ້ວ.

ເວລາປຸກລຸກຂົນຂວາຍ ແລະ ເຂົ້າອີງການຈັດຕັ້ງ ມະຫາຊົນຕ່າງໆແມ່ເຖົ້າບຸນຫຼ້າ ໄດ້ເຄື່ອນໄຫວວຽກງານຈັດຕັ້ງມະຫາຊົນ ພົບຄວາມຫຍຸ້ງຍາກຫລະກັນດານບໍ, ເວລາເພິ່ນພົບຄວາມຫຍຸ້ງຍາກກວ່າໝູ່ນັ້ນ ແມນເວລາເພິ່ນຢູ່ຕາເວັນອອກ ກັບຢູ່ສາລະວັນ. ເວລາຢູ່ຕາເວັນອອກນັ້ນແມ່ນດຸເດືອດທີ່ສຸດ,

ນັບແຕ່ມື້ເຂົ້າການປະຕິວັດຫັ້ນແລ້ວ, ຄືເພິ່ນເວົ້າຫັ້ນແລ້ວແມ່ນຕຳຫຼວດ,ຢູ່ຕາເວັນອອກຫັ້ນ ໄປກາງຄ່ຳກາງຄືນ, ບໍ່ຈັກຫາກ,ບໍ່ຈັກຮື້ນ, ບໍ່ຈັກຍຸງ. ກາງຄືນນ້ຳມາກໝູ່ບໍ່ໄປເພິ່ນກໍ່ໄປສິ່ງຈົດໝາຍໃຫ້ຈຸບົວລາງຫັ້ນ, ເຂົາລຸງບົວລາງຢູ່ປ່າ. ຫຼັງຈາກນັ້ນອີກເພິ່ນຮີບໄປຕິດຕໍ່ທາງດິນ, ທາງດິນຫັ້ນຮີບບອກຕິດຕໍ່ ແລະເປັນພະນັກງານຂົນຂວາຍ, ພັດເຈີກັບສັດຕູອີກ. ເວລາພວກແມ່ເຖົ້າບຸນຫຼ້າໄປນະຄອນເພັງຫັ້ນ ລະແມ່ນວ່າເພິ່ນໄປກັບອ້າຍເກິ່ງ, ຄະນະພັກເມືອງຫັ້ນລາວພັກຮູ້ເວົ້າ, ເວລາໄປກັບລາວແມ່ເຖົ້າບຸນຫຼ້າກໍ່ມີຕິດຕໍ່, ເພິ່ນກໍ່ມີແມ່ຍິງຕິດຕໍ່ ອ້າຍເກິ່ງກໍ່ມີຕິດຕໍ່ ພໍດີແມ່ເຖົ້າບຸນຫຼ້າໄປກາຍຕາແສງຕານປຸ່ນຫັ້ນ, ສັດຕູເຂົ້າສະກັດຢູ່ຫັ້ນພໍດີເຂົາຍິງກັນ, ແມ່ເຖົ້າບຸນຫຼ້າຈັກຊິເຜເຮັດແນວໃດ, ເພິ່ນບໍ່ເຄີຍເຈີະແນວນີ້ຈັກເທື່ອ, ກໍ່ເຈີະຢູ່ແຕກຢູ່ພຸ້ນ ຢູ່ພີ້ເຂົາເວົ້າຂ່າວນັ້ນ. ພໍດີນາງພັດຍາວລາວນັ້ນກໍ່ເຈີະ, ມັນຢືນຢູ່ບ່ອນປະຕູລົດ. ພໍດີອ້າຍເກິ່ງກໍ່ດຶງແຫລະດຶງ ແມ່ເຖົ້າບຸນຫຼ້ານີ້: ໝູບຢູ່ກ້ອງລ່າງລົດນີ້ລາວວ່າທະຫານກໍ່ປະຈຳຢູ່ຫັ້ນບ່ອນດ່ານ, ບ່ອນຜ່ານດ່ານຫັ້ນ. (ທະຫານເຂົາ ໄປປະຈຳ) ເບິ່ງເຂົາຕີກັນ, ປືນແມ່ເຖົ້າບຸນຫຼ້າກໍ່ມີ, ແຕ່ເພິ່ນບໍ່ເອົາອອກ. ເພິ່ນຄິດອື່ນ! ຄ້ອນເພິ່ນເອົາປືນອອກ ແຕ່ເພິ່ນຄິດວ່າເອົາໄມ້ຄ້ອນດີກວ່າປືນ ເພາະເພິ່ນບໍ່ສາມາດຍິງປືນ.

ເພິ່ນມີຢູ່ປືນຫາກເພິ່ນຍິງບໍ່ໄດ້. ເພິ່ນຢ້ານສັດຕູຍາດປືນກໍ່ປານນັ້ນ, ເພິ່ນວ່າຈັກໜ້ອຍຊິຍິງໂຕເອງ, ເພິ່ນບໍ່ເອົາອອກປືນຫັ້ນ, ອ້າຍເກິ່ງເວົ້າ ເຈົ້າຢາກຕາຍເບາະ ລາວວ່າເປັນສັງເຈົ້າບໍ່ເອົາປືນອອກລາວວ່າ: ເພິ່ນວ່າຊິເຮັດອີສັງປືນ ປືນກໍ່ມີນຳທະຫານລະຫວະ.ລາວລະເວົ້າຫວານຈ້ອຍໆ, ລາວປາກຊັ້ນວ່າ: ບໍ່ຮູ້ແນວໃດ? ແມ່ເຖົ້າບຸນຫຼ້າວ່າ: ເຈົ້າຢ່າຊູ່ຢ້ານນຳ, ເຈົ້າຢ້ານຫຼາຍຈັກໜ່ອຍເຈົ້າຕາຍ. ແມ່ເຖົ້າບຸນຫຼ້າເວົ້າໃຫ້ລຸງເກິ່ງຈັກໜ່ອຍກໍ່ຈຸທະຫານສັດຕູກໍ່ມາແລ້ວ, ພວກແມ່ເຖົ້າບຸນຫຼ້າ ກໍ່ໄລ່ສັດຕູແລ້ວ ໄປໆໆ ລຸງເກິ່ງວ່າ, ໄປຂຶ້ນລົດເລີຍໄປວິດ. ສັດຕູສະກັດລົດ,ຂອງແມ່ເຖົ້າບຸນຫຼ້າ! ເວລາສັດຕູສະກັດລົດພວກເພິ່ນກໍ່ຍັງຢູ່ໃນລົດຫັ້ນແລ້ວ,ຕຳຫຼວດກໍ່ອອກແຕ່ລົດຫັ້ນ, ພວກປ້ອງກັນພວກແມ່ເຖົ້າບຸນຫຼ້າຫັ້ນ ເຂົາອອກເຂົາກໍ່ຕີສັດຕູທາງດ້ານນອກແຄມທາງ.

ອ້າຍເກົ່ງດຶງ ແມ່ເຖົ້າບຸນຫຼ້າ ໃຫ້ຢູ່ກ້ອງຕະລ່າງລົດ, ນາງພັດຍາວໄປຢືນຢູ່ບ່ອນປະຕູລົດຜູ້ຍິງ, ພໍດີເຂົາວ່າ ອ້າຍເກົ່ງຫັ້ນເຮົາບໍ່ເອົາປືນອອກ, ອ້າຍເກົ່ງຮ້າຍເພິ່ນ ແມ່ເຖົ້າບຸນຫຼ້າ ເພິ່ນວ່າເປັນຫຍັງເຈົ້າບໍ່ເອົາອອກປືນ?, ແມ່ເຖົ້າບຸນຫຼ້າວ່າ: ເອົາອອກອີ່ສັງ,ປືນກໍ່ມີນຳທະຫານພຸ້ນເພິ່ນວ່າ. ເຈົ້າບໍ່ໄດ້ຍິງ, ຢ່າຊູ່ປາກນຳ ແມ່ເຖົ້າບຸນຫຼ້າວ່າ. ສຸດທ້າຍເຂົາໄລ່ແລ້ວ ພວກປະຕິວັດຫັ້ນ, ພວກແມ່ເຖົ້າບຸນຫຼ້າກໍ່ໄປວິດ ອັນນັ້ນແມ່ນໄລຍະປົດປ່ອຍແລ້ວ. ນຳຫຼັງນີ້ແລ້ວລວມເຂົ້າກັບສາລະວັນແລ້ວ, ພວກແມ່ເຖົ້າບຸນຫຼ້າປຸກລຸກສາມຕົວເມືອງ. ລວມແຂວງນີ້ ທ້າຍຂອງປີ 75 ແລ້ວເພິ່ນໄປປຸກລຸກປີ 1997, ປີ 1978, ປີ 1979, ສາມປີ. ສາມປີຫັ້ນ ປີ 1997, ປີ 1980, ປີ 1984 ເພິ່ນຮຽນຢູ່ຫວຽດນາມ, ເພິ່ນວ່າແບ່ງແຂວງແລ້ວ ປີ 1984: ສາລະວັນ - ເຊກອງແຍກອອກຕ່າງຫາກແລ້ວ.

ລຸງບຸນມີ ພິມມະເສນ

ເຜົ່າລາວລຸ່ມ

(ແຂວງ ເຊກອງ)

ລຸງບຸນມີນີ້ເກີດເມື່ອປີ 1925, ປະຈຸບັນນີ້ເພິ່ນອາຍຸໄດ້ 79 ປີ, ບ້ານຂອງເພິ່ນແມ່ນເກີດຢູ່ ບ້ານພະໂພ, ຕາແສງພະໂພ, ເມືອງປະທຸມພອນ, ແຂວງຈຳປາສັກ. ພໍ່ແມ່ເພິ່ນເສຍໝົດແລ້ວ, ພໍ່ຊື່ວ່າ ພໍ່ອອນ, ແມ່ສາ, ອ້າຍເອື້ອຍນ້ອງຂອງເພິ່ນ 5 ຄົນ, ຍິງ 4 ຄົນ ຊາຍ1.

ເຂົາ 5ຄົນ ບໍ່ໄດ້ເຮັດວຽກການຳລັດຖະການ, ແຕ່ກ່ອນມີຜູ້ໜຶ່ງ ເຮັດວຽກນີ້ ອອກແລ້ວ. ສາວວານ ກໍ່ອອກບຳນານຢູ່ປາກເຊ, ແຕ່ກ່ອນເປັນແພດ. ໃນ 5 ຄົນຜູ້ຍິງ 4 ຄົນ.

ການແຕ່ງງານ ຂອງລຸງບຸນມີ ມັນເປັນແບບນີ້, ເມຍທຳອິດນີ້ ປີ 1949, ລຸງບຸນມີໄປຮຽນຢູ່ວັດ, ເລີຍເມຍເພິ່ນຕາຍ. ອັນນັ້ນ ແມ່ນເມຍທຳອິດຂອງເພິ່ນ, ໄດ້ລູກໜຶ່ງຄົນ, ຍັງຢູ່ດຽວນີ້ເຂົາກຳລັງເອີ້ນໄປເຮັດປະຫວັດ ເພື່ອເອົາເງິນ, ໄດ້ລູກຜູ້ທີ 1, ອາຍຸຫາກໍ່ໄດ້ 4 ເດືອນ ຖືກຍິນຍິງທຳລາຍບ້ານ, ເລີຍຖືກແມ່ລາວຕາຍ. ໄລຍະຍິນຝຣັ່ງຍິງທຳລາຍບ້ານທັ້ນ. ເມຍຜູ້ທີສອງຂອງເພິ່ນຫຼັງຈາກລຸງບຸນມີ ໄປເປັນທະຫານອິດສະຫຼະແລ້ວ, ຍ້ອນຄວາມຄຽດແຄ້ນແລ້ວ ເພິ່ນໜີໄປເປັນອິດສະຫຼະເລີຍ ໃນວັນທີ 6 ເດືອນ 10 ປີ 1949. ເພິ່ນທັ້ນວ່າລູກເມຍເສຍແລ້ວເລີຍມອບລູກສາວນີ້ໃຫ້ພໍ່ແມ່ຂອງເພິ່ນເບິ່ງ, ເພິ່ນເອງນີ້ອິດທົນບໍ່ໄດ້ມີແຕ່ໄປຂ້າບັກຝຣັ່ງທີ່ນັ້ນ, ແລະເພິ່ນກໍ່ເລີຍໄປນຳກອງຮ້ອຍໄຊເລີຍ [21]. ບາດນີ້ທັງຊິແມ່ນການເຄື່ອນໄຫວທຳອິດຂອງລຸງບຸນມີ, ເພາະວ່າເພິ່ນອອກໄປເພື່ອເມຍກໍ່ວ່າໄດ້. ບາດນີ້ໃນເມື່ອເພິ່ນໄປເຄື່ອນໄຫວຢູ່ກອງຮ້ອຍໄຊນີ້, ອອກເຄື່ອນໄຫວໃນທ້ອງຖິ່ນຂອງເພິ່ນເອງ, ກອງຮ້ອຍໄຊຈັກກະພັດ,

---

[21] ກອງຮ້ອຍໄຊຈັກກະພັດໂດຍແມ່ນລຸງສຸພານຸວົງເປັນຜູ້ຈັດຕັ້ງຂຶ້ນປີ 1945 ລຸງສີທົນກົມມະດຳ ເຜົ່າລະເວນເປັນຮອງ ລຸງຄຳໄຕ ເປັນຜູ້ບັນຊາລວມພາກໄຕ້.

ແລ້ວເຄື່ອນໄຫວໃນຂອບເຂດພະໂພນີ້ເປັນໄລຍະເວລາປະມານ 5-6 ເດືອນ ທີ່ນັ້ນ ແລ້ວກໍ່ເລີຍກອງຮ້ອຍໄຊນີ້ຂ້າມໄປຈຳປາສັກ, ເພິ່ນກໍ່ເລີຍເຄື່ອນໄຫວ ທາງຈຳປາສັກພຸ້ນ, ແລະ ທາງບ້ານບຸ່ນ, ໂພນທອງ, ທາງສຸຂຸມມາ, ໜອງ ໄຕລອງໄຮ ໄປພຸ້ນແຫລະ ເຄື່ອນໄຫວຢູ່ຫັ້ນ. ຮອດປີ 1950 ເພິ່ນກັບຄືນ, ຊິແມ່ນຄຳສັ່ງຈາກເຂດ, ເພິ່ນເອງກໍ່ບໍ່ຮູ້ ເພິ່ນເປັນທະຫານເດ. ບາດນີ້ ເພິ່ນ ກັບຄືນມາແລ້ວ ມາມອບຢູ່ອັດຕະປື, ຄາວໜຶ່ງນາຍພົນບອກເພິ່ນວ່າ ເອົາກອງ ຮ້ອຍໂຕນີ້ຂຶ້ນໄປ,ລຸງບຸນມີກໍ່ຍັງເປັນທະຫານຢູ່ ບໍ່ແມ່ນພົນທະຫານ ພຽງແຕ່ ນາຍໝູ່.

ເວລານັ້ນ ລຸງບຸນມີ ເປັນຫົວໜ້າ ກອງຮ້ອຍໄຊຈັກກະພັດ, ທ່ານບຸນ ພົມ ມະຫາໄຊ ກັບ ທ່ານແກ້ວ ຫຼວງເສນາ ຜູ້ກຳກັບ, ການເງິນກອງຮ້ອຍກໍ່ ແມ່ນລຸງສີທົນນີ້ແລ້ວ, ສີທົນ ກົມມະດາ ເພີ່ບໍ່ໄດ້ປະດອກ ກອງຮ້ອຍໄຊ ລາວກຳເລີຍ, ຜູ້ບັນຊາກອງຮ້ອຍ ຕ່າງຫາກ, ຊິແມ່ນເປັນບັນຊາກອງພັນ ອີ່ ສັງກໍ່ບໍ່ຮູ້ດອກ. ຈາກຫັ້ນແລ້ວກໍ່ຂ້າມມາແຕ່ຈຳປາສັກ, ຂ້າມທາງເມືອງເງິນ, ເພິ່ນສິ່ງທາງກອງຮ້ອຍເພິ່ນນີ້ມາຢູ່ເລົ່າງາມ,ແມ່ນປຽນພະນັກງານບັນຊາແລ້ວ, ທ່ານພົມມາ ດວງມາລາ, ເປັນຜູ້ບັນຊາການ, ກັບອ້າຍພະລິດ ກຽງຄຳ, ເປັນ ຜູ້ບັນຊາ. ບາດນີ້ລຸງບຸນມີ ນີ້ຍັງເປັນຫົວໜ້າໝູ່ຢູ່, ໝາຍຄວາມວ່າເຄື່ອນໄຫວຢູ່ ເມືອງເລົ່າງາມນີ້ໄດ້ມາຕຶກຢູ່ກອງຮ້ອຍໜຶ່ງມີຢູ່ 4ໝວດ, ເພິ່ນແບ່ງອອກເອົາ ໝວດລຸງບຸນມີນີ້ມາຢູ່ເມືອງວຽງທອງເກົ່າ, ທ່າແຕ່ງນີ້ແຫລະ, ເມືອງລະມາມນີ້ ແລະ. ເລື່ອງນີ້ພໍ່ລຸງບຸນມີມີເວລານັ້ນຂັ້ນເທິງເລືອກເປັນຮອງໝວດ, ຫົວໜ້າ ໝວດແມ່ນ ອ້າຍສີສະໝານ ບ້ານແຄະ ເປັນຫົວໜ້າໝວດ, ແລະຍັງແມ່ນ ບັນຊາ ກອງຮ້ອຍເບົາ ຍັງແມ່ນປະດິດກຽງຄຳຄືເກົ່າ. ລຸງບຸນມີ ແມ່ນຢູ່ໝວດ ຂອງປະດິດ ກຽງຄຳ, ເປັນໝວດ ໝາຍວ່າ ສະໝານຫັ້ນ ແລະລຸງບຸນມີ ເປັນຮອງ.

ຄົນເລົ່ານີ້ ບໍ່ມີຊີວິດຢູ່ແລ້ວ, ຍັງໄດ້ຍິນວ່າ ແຕ່ອ້າຍສະໝານ ຢູ່ແກ້ງ ໄຊຍັງ, (ສີສະໝານ ຄົນອັດຕະປື) ບ້ານຕະແຄະ ຢູ່ອັດຕະປື ຕາມຖາມເຂົາ

ວ່າຫວ່າງບໍ່ເທິງນີ້ແລ້ວ ຄືວ່າຍັງຢູ່,ແຕ່ວ່າ ອ້າຍກຽງຄໍາ ແລະແກ້ວຫຼວງເສນາ ທັ້ນບໍ່ມີແລ້ວ. ແລະຈາກນັ້ນຕົກມາໃນເມືອງວຽງທອງເກົ່າແລ້ວ ລຸງບຸນມີກໍ່ມາ ເຄື່ອນໄຫວສ້າງທະຫານເມືອງ, ກໍ່ມີຜູ້ບັນຊາກອງຮ້ອຍຄັກແນ່ແລ້ວ, ເຄື່ອນ ໄຫວນໍາໝູ່ນີ້ແລະດຽວນີ້ຍັງມີຫຼາຍໆຄົນເຂົາກໍ່ຖາມຫາລຸງບຸນມີຢູ່, ເພາະວ່າລຸງ ບຸນມີ ເປັນໜ່ວຍເຄື່ອນໄຫວ ກໍ່ສ້າງກອງຫຼອນ, ແລະເວລານັ້ນ ໃຫ້ອ້າຍ ຄໍາສຸກ ໄຊຍະແສງເຈົ້າເມືອງ ແລະ ກໍ່ລຸງບຸນມີ ໄປເປັນທະຫານປ້ອງກັນຄະ ນະເມືອງຫຼືປ້ອງກັນຄະນະເມືອງກໍ່ແມ່ນ, ທັງກໍ່ສ້າງທັງອີສັງ ນັບແຕ່ບ້ານ ລາງ ດອນຈັນຂອບເຂດໝົດແລ້ວ ທາງຟາກເຊກອງເບື້ອງນີ້ ອາຊັ້ນສະທັ້ນ ເຂົາ ເຫັນໜ້າລຸງບຸນມີເຂົາກໍ່ວ່າເພິ່ນນີ້ເປັນຜູ້ກໍ່ສ້າງເຂົາ, ໃນໄລຍະລຸງບຸນມີ ມາຢູ່ ເມືອງວຽງທອງນີ້ ວຽກຈຸໜັກຂອງເພິ່ນແມ່ນໜ່ວຍກໍ່ສ້າງກອງຫຼອນ, ຖ້າສັດຕູ ອອກມາຕີ, ກອງໂຈນທັ້ນແລ້ວຍິງ ບາດໜຶ່ງສອງຕາຍ ຫຼື ບໍ່ຕາຍ ກໍ່ບໍ່ຈັກ. ນໍາເສັ້ນທາງໝູ່ນີ້ກໍ່ຫຼາຍເທື່ອເພິ່ນຕີໃນໄລຍະ ປີ 1950ນີ້. ບາດນີ້ ຈາກການ ສຶກສາ ຮໍ່າຮຽນວັດທະນະທໍາໃຫ້ຍິງໜຸ່ມຊາວໜຸ່ມ ເພິ່ນເອງກໍ່ພໍເປັນແນ່, ເພາະ ວ່າເພິ່ນຮຽນຈາກວັດ ບໍ່ໄດ້ຮຽນມາຈາກໃສ. ແລ້ວຮອດປີ 1951-1952 ລຸງ ບຸນມີຈຶ່ງໄດ້ເຂົ້າພັກຄອມມຸຍນິດອິນດູຈີນ, ວັນທີ ເດືອນປີເພິ່ນບໍ່ຈື່ປານໃດ, ບາດນີ້ກໍ່ເຄື່ອນໄຫວຢູ່ນີ້ ຈົນຮອດປີ 1953 ເດືອນ 9 ຄືຊິແມ່ນມີຄໍາສັ່ງ ຂອງ ສູນກາງບອກວ່າຍົກກອງຮ້ອຍຂຶ້ນໄປສູນກາງ, ກອງຮ້ອຍທີ່ເພິ່ນນີ້, ກອງຮ້ອຍ ເພິ່ນຢູ່ນີ້ໝວດທີ 10 ທີ່ຂຶ້ນກັບກອງໄຊ ຈັກກະພັດຢູ່ເລົ່າງາມ.

ຜູ້ຕັ້ງກອງໄຊ ຈັກກະພັດ ແມ່ນລຸງສຸພາ ພຸ້ນແລ້ວ, ການເຄື່ອນໄຫວ ມາຮອດປີ 1953 ນີ້ ວັນທີ 20 ເດືອນ 9 ປີ 1953 ແລ້ວແມ່ນ ລຸງສຸພາ ນຸວົງ ນີ້ພາກອງຮ້ອຍນີ້ ຍົກໝົດຂຶ້ນໄປສູນກາງ[22], ເວລານັ້ນ ບໍ່ຈັກເລື່ອງຫຍັງ ມັນບໍ່ເວົ້າສາ, ໝາຍຄວາມວ່າ ເວລານັ້ນອ້າຍກິດຄໍາມຸງຄຸນ ຕາມໜ້າກອງ ຮ້ອຍບັນຊາເອງ ລະຫວ່າງ 10 ຄົນນີ້ ແລະນັບທັງປີກຄອງແດ່ ທັງອີສັງໆ

[22] ກອງຮ້ອຍໄຊຈັກກະພັດມີຊື່ຄິ້ງຕິວ ຮອດວັນທີ 20/9/1953. ລຸງສຸພານຸວົງ ນໍາພາຂຶ້ນມາ ສູນກາງຢູ່ຊໍາເໜືອ ໂດຍແມ່ນທ່ານ ກິດ ມຸງຄຸນບັນຊາ ໂດຍໄດ້ຮັບຄໍາສັ່ງຈາກສູນກາງ.

ຂຶ້ນໄປສູນກາງ, ແລະ ກໍ່ຍ່າງລັດກາງທີ່ງນີ້ ຂຶ້ນໄປຫາດາກຈຶ່ງ. ອອກຈາກດາກຈຶ່ງ ໄປໃສ່ເລົ່າງາມ, ໄປທາງລັດຖຽງນີ້ແລ້ວ, ໝາຍຄວາມວ່າເຂົ້າປາອາຫານເຄື່ອງນີ້ກຸ້ມໃຜກຸ້ມມັນ. ໃນເວລານັ້ນ ວັນທີ 20 ເດືອນ 9 ປີ 1953 ໄດ້ຍິກກໍາລັງຈັກຊິແມ່ນຄໍາສັ່ງສູນກາງອີ່ສັງກໍ່ບໍ່ຈັກ, ພວກເພິ່ນໄປມີກອງຮ້ອຍອິນຊິມາປ່ຽນຢູ່ນີ້, ທາງພວກເພິ່ນໄປແມ່ນສູນກາງເອີ້ນຍົກໄປ. ພວກເພິ່ນໄປຕັ້ງແຕ່ນີ້ເດືອນ 9 ພໍດີຮອດເດືອນ 12 ເດືອນໜຶ່ງນີ້ແຫລະ ຈຶ່ງຕົກຢູ່ເມືອງຄູນເມືອງໂສ້ຍນໍາພຸ້ນແລ້ວ, ເຂດບ້ານຕ້ານ ບ້ານຊາບພຸ້ນແຫລະ. ເມື່ອໄປຕົກຢູ່ພຸ້ນແຕ່ກ່ອນພວກເພິ່ນບໍ່ຮູ້ດອກ ອັນນີ້ເມືອງຊໍາເໜືອ ບໍ່ຈັກເມືອງນັ້ນເມືອງນີ້, ອັນນີ້ເມືອງທັ້ນບໍ່ເຫັນຄືເມືອງ, ໝາຍວ່າເດີນທາງຈັກມື້ຈັກວັນແລ້ວພໍດີ 5 ເດືອນ, ທັງພັກແດ່ຜູ້ເຈັບໄຂ້ໄປບໍ່ຮອດກໍ່ຫຼາຍຄົນ. ຄົນເຈັບບ່ອນໃດໄຂ້ໜັກ ກໍ່ຝາກຈາມ, ມີເພື່ອນຫວຽດນາມພາໄປເດ, ເພືອກັບອ້າຍລຸ ສອງຄົນເປັນຜູ້ພາທາງ. ເພິ່ນວ່າ ໂອ! ເບິ່ງຕື່ພວກເພິ່ນ ຜ່ານຕັ້ງແຕ່ເຂດ 5 ນີ້ໜາ ໄປຮອດເຂດ4 ຂຶ້ນພູຕັ້ງແຕ່ 6 ໂມງເຊົ້າ, 12ໂມງຈຶ່ງຮອດຈອມມັນ, ລົງໄປຮອດຕີນພູ 6 ໂມງແລງແລ້ວພວກເພິ່ນ, ໄປນອນຢູ່ຕີນພູທັ້ນ. ບາດນີ້ຜ້າຝົນຜ້າຢາງ ບາໂລບໍ່ມີ, ມີແຕ່ກາບໝາກທັ້ນແລ້ວ ບໍ່ວ່າລຸງບຸນມີບໍ່ວ່າໝູ່ ແລະຂອງເພິ່ນເອົາມາເຮັດເປັນບາໂລທັ້ນ ໃສ່ເຄື່ອງພໍໂລດ, ກາບໝາກເຮົາຄຽວທັ້ນໜາ ມາເຮັດບາໂລພໍໄດ້ໃສ່ເຄື່ອງນຸ່ງ ທາງນີ້ເຕັມແລ້ວ, ບໍ່ມີລູກປືນຂອງວ່າພວກເພິ່ນເດີນທາງ. ຜູ້ໜຶ່ງຕ້ອງຖືລະຫວ່າງ 8 - 12 ກິໂລ ແລະ ມີອາຫານມີນ້ໍາມີມມີອີ່ສັງ, ບ່ອນຫວຽດນາມເຂົາປະກອບໃຫ້, ໄປບ່ອນໃດທີ່ເພິ່ນວ່າຍ່າງທີໄປໃຫ້ແລ່ນກໍ່ຕ້ອງໄດ້ແລ່ນ, ເປັນຕົ້ນແມ່ນບ້ານຕິງກີນີ້ໜາ ມັນຍິງປືນໃຫຍ່ເຂົ້າມາໃສ່ຊາຍແດນພີ້ໜາ, ເພາະວ່າປິດມັນຍັງຫຼາຍເດ, ຍັງວ່າພວກເພິ່ນໄປນໍາພູນໍາປ່າໜາ, ບໍ່ຈັກທິບຈັກແດນແລ້ວ ຊອດໃສ່ພຸ້ນທາງ ຊໍາເໜືອໃຕ້ພຸ້ນ. ເພິ່ນວ່າຮອດດິນລາວແລ້ວເດີຊໍາໃຕ້,ຮອດຊໍາໃຕ້ພວກເພິ່ນກໍ່ພັກຢູ່ທັ້ນ 5-6ວັນ, ພວກເພິ່ນເດີນທາງຕໍ່ຮອດການເມີງພຸ້ນແຫລະ. ຈັ່ງວ່າໄລຍະໜຶ່ງຂອງຊີວິດລຸງບຸນມີທັ້ນ. ບາດນີ້ເພິ່ນໄປລະຈັ່ງໃດບາດນີ້ ທາງປົກຄອງນີ້ ກໍ່ຈັບອອກ

ໄປໃສ່ ທາງປົກຄອງ, ທາງທະຫານສັບໃສ່ທະຫານ, ທາງປົກຄອງຜູ້ໜຸ່ມ ແດ່ ຍົກໄປທະຫານ, ຂັ້ນເທິງກໍ່ໃຫ້ໄປທາງທະຫານ. ລຸງບຸນມີໄປຮອດ ແລ້ວພັກຢູ່ ຫັ້ນແລ້ວ, ທາງສູນກາງກໍ່ລົງມາພົບມາປະກໍ່ມີ, ພົບປະກໍ່ຍາກຂອງຍິນຂອງ ຝຣັ່ງມັນຍັງຖີ້ມຢູ່ເດ, ມັນຍິງບໍ່ແມ່ນໜ້ອຍປະຊາຊົນຢູ່ຖ້ຳໝົດ ບໍ່ມີດອກຢູ່ບ້ານ ຫັ້ນ, ມີແຕ່ຊອກຫານຳຖ້ຳນຳຮູແລ້ວຄາວນັ້ນ. ອັນນັ້ນໄດ້ກ້າວໜຶ່ງ ເມື່ອພວກ ເພິ່ນໄປຮອດຊຳເໜືອ, ແລ້ວເຂົາແຕ່ງເຂົ້າທະຫານ, ແຕ່ຢູ່ເບື້ອງທາງເລກທີ 13-12 ຫັ້ນບໍ່ເວົ້າດອກເລື່ອງສູ້ຮົບນີ້, ເວົ້າໄລຍະລຸງບຸນມີ ໄລຍະໃຫຍ່ໆ ຂອງ ເພິ່ນ,ໜຶ່ງແມ່ນເຂົ້າໄປຮອດຊຳເໜືອ. ບາດນີ້ຈາກຫັ້ນໄປເພິ່ນຊິເປີດໂຮງຮຽນ ກົມມະດຳ[23], ໂຮງຮຽນທະຫານ ໂຮງຮຽນກົມມະດຳຊຸດທີ 6 ອອກໝົດພວດກໍ່ ຍັງແມ່ນອ້າຍເກດ ຄຳມຸງຄຸນ ບັນຊາຢູ່, ລຸງບຸນມີເອງຍັງເປັນຮອງຢູ່. ບາດນີ້ ເພິ່ນເລີຍ, ໄປຮຽນຢູ່ໂຮງຮຽນກົມມະດຳມັນບໍ່ຊ່າງຊິເວົ້າ ຈົນທົ່ວໝົດເມືອງຊຳ ເໜືອ ອັນພວກເພິ່ນຍ້າຍໄປໂຮງຮຽນເພາະມັນຢ້ານເສຍລັບ ແລະ ຍ້າຍ ໄປ,ພວກເພິ່ນເຮັດໂຮງຮຽນນຳຂົນເຂົ້າກິນນຳຫັ້ນ. ບາດເຂົ້າຂອງນີ້ມັນບໍ່ມັກ ເຈັບມັກໄຂ້, ບໍ່ໄດ້ ເຂົ້າໂຮງໝົດ ໂຮງໝໍຄືໝູ່, ມັນຄືນຄັນຊິເວົ້າແລ້ວ ມັນແມ່ນ ມັກມີແນວ. ບາດນີ້ ເພິ່ນເລີຍ ໄປເຂົ້າໂຮງຮຽນ, ເພິ່ນກໍ່ເປົ່າໄປຮອດພຸນລ່ອງ ມ້າ, ກັບແຕ່ລ່ອງມ້າ ເພິ່ນອອກໄປຮຽນຢູ່ຫວຽດນາມ ແຂວງແທ້ງຮ໋ວາ, ຈັກ ບ້ານອີ່ສັງເພິ່ນລືມແລ້ວ. ລຸງບຸນມີໄປຮຽນຢູ່ຫັ້ນຈົນເຂົາປິດຮຽນ, ຮຽນຢູ່ຫັ້ນເປັນ ປີກໍ່ມີ, 3 ເດືອນກໍ່ມີ, ຂອງເພິ່ນຊິໄປຮຽນຫັ້ນຫາຂົນເຂົ້າແດ່ ອີ່ສັງມາກິນແດ່, ເຮັດເຮືອນເຮັດຊານນຳແດ່. ອັນນັ້ນໄລຍະທີ່ສອງແມ່ນເພິ່ນໄດ້ຮຽນຢູ່ໂຮງຮຽນ ກົມນອນທີ 6, ບາດປິດໂຮງຮຽນກົມນອນ ຊຸດທີ 6 ພໍດີ ປີ1954 ໄດ້ຍິງກັບ ຝຣັ່ງແລ້ວ. ປີ 1954 ໂຮງຮຽນກົມມະດຳ ລຸງບຸນມີພະຍາຍາມ ຄຶດຄືນ: "ໃຜ ນໍເປັນຜູ້ອຳນວຍການໂຮງຮຽນເດີ ໜຶ່ງທ່ານບຸນສຸກຫົວໜ້າການເມືອງ, ທ່ານ

---

[23] ໂຮງຮຽນກົມມະດຳແມ່ນໂຮງຮຽນນາຍທະຫານໄດ້ຈັດຕັ້ງຂຶ້ນແຕ່ປີ 1953 ທີ່ຊຳເໜືອ.ໂດຍ ເອົາຊື່ "ອົງກົມມະດຳ" ຊຶ່ງເປັນເຈົ້າກົກເຈົ້າເລົ່າຂອງເຜົ່າລະເວນ ນຳພາຕີຝຣັ່ງແຕ່ປີ 1910 - 1936 ຢູ່ເຂດເມືອງປາກຊ່ອງ-ຈຳປາສັກ.

ບົວຄຳ ຫົວໜ້າຝ່າຍການທະຫານຮູ້ແຕ່ 2 ຫົວໜ້ານີ້ແລ້ວ, ຜູ້ຊ່ວຍວຽກຊ່ວຍງານກໍ່ບໍ່ຮູ້ດອກ". ສ່ວນໂຮງຮຽນກົມມະດຳນີ້, ຈາກນັ້ນກໍ່ຢຸດຍິງພວກເພິ່ນກໍ່ສະຫຼຸບປິດໂຮງຮຽນ, ພວກເພິ່ນປິດໂຮງຮຽນກໍ່ຖືວ່າປິດຢູ່ຫວຽດນາມພຸ້ນແຫລະ ຂັ້ນເທິງວ່າດຽວນີ້ຢຸດຍິງແລ້ວກັບຝຣັ່ງ, ແລ້ວຄືຊິແມ່ນເດືອນ 7 ປີ 1954. ຂັ້ນເທິງເວົ້າວ່າດຽວນີ້ຢຸດຍິງກັບຝຣັ່ງ, ພວກເຮົາດຽວນີ້ເມືອຢ່າງກິງໆ ແລ້ວຄືຊິບໍ່ໄດ້ລີ້ລັດລີ້ສັງ. ແລ້ວຂັ້ນເທິງວ່າລຸງບຸນມີເວລາເພິ່ນອອກເປີດເຜີຍ, ເວລາຢຸດຍິງບໍ່ວ່າໃຕບໍ່ວ່າໝູ່ດອກເນາະ,ເພິ່ນເອົາເກີບແພມາໃຊ້ຢູ່, ມັນໃສ່ບໍ່ໄດ້ເດ, ມັນເຈັບ ມັນບໍ່ພໍດີຕີນ ເກີບແພຫວຽດນາມນີ້ນາອ້າວ. ດຽວນີ້ຈຸທີໜຶ່ງເຂົາຂຶ້ນເຕົ້າໂຮມນີ້ ຊິຮອດແທ້ງຮວ້າແລ້ວ, ພໍດີປິດໂຮງຮຽນ, ພໍດີເຈີກັນກໍ່ເຈີແທ້, ຈຸທີໜຶ່ງທີ່ເຂົ້າໂຮມຢູ່ຊຳເໜືອແລ້ວໄປຮອດ.ຫຼັງຈາກພວກເຂົາຮອດຊຳເໜືອແລ້ວ, ທາງໂຮງຮຽນນີ້ມາໝົດ, ລຸງບຸນມີກໍ່ຖືກການຍ້ອງຍໍ, ແລະເພິ່ນໄດ້ຮັບໃບຍ້ອງຍໍຂອງກະຊວງເດ. ເພິ່ນເປັນຄົນ ບໍ່ຈັກຕາຍ, ທັງບັນຊາໝູ່ທັງອີ່ສັງ, ເພິ່ນຍິງປືນກໍ່ໄດ້ລະດັບດີຄາວນັ້ນ. ພໍດີມາຮອດນີ້ ລຸງໄກສອນ ນີ້ແລ້ວເພິ່ນວ່າ: "ບຸນມີໝວດເຈົ້ານີ້ເດັ່ນເນາະ! ຈັກແຫລະ ອ້າຍວ່າເດັ່ນກໍເດັ່ນ! ເຈົ້າຊິຢູ່ນຳຂ້ອຍ ເພິ່ນວ່າຈັ່ງຊັ້ນ." ລຸງບຸນມີ ຄິດໝົດຫວັງແຫລະ ຈັ່ງວ່າ ຂອງຈິດໃຈລຸງບຸນມີນີ້ຢາກໄປສະໜາມຮົບພຸ້ນ. ບໍ່ແມ່ນຊິເພິ່ນຢາກຢູ່ອີກ, ໝູ່ຂອງເພິ່ນຫັ້ນແບ່ງໄປຜົ້ງສາລີກໍ່ມີ, ໄປໃສກໍ່ມີ ໄປຢູ່ກອງພັນນັ້ນ ກອງພັນນີ້, ລຸງບຸນມີນີ້ຈັ່ງໃດບາດຂັ້ນເທິງມາພົບວ່າເຈົ້າຊິຢູ່ນຳຂ້ອຍ?, ລຸງບຸນມີວ່າ: ບ໊ະ! ບໍ່ໄດ້ແຫລະອ້າຍເອີຍ, ນ້ອງຢາກໄປສະໜາມຮົບ. ຂອງລຸງບຸນມີກໍ່ຍັງໜຸ່ມຍັງນ້ອຍກໍ່ເອີ້ນທັງອ້າຍ ທັງຂ້ອຍຂັ້ນເທິງວ່າ: ບໍ່ໄດ້ດຽວນີ້ເຈົ້າຊິໄປເປັນນາຍຄູສອນ ຢູ່ໂຮງຮຽນກົມມະດຳຊຸດທີ 7! ຫຽວຂຶ້ນ ຫຽວລົງ, ຂໍເພິ່ນຫັ້ນບໍ່ໄດ້, ກຽມໄດ້ອີ່ສັງແຫລະ, ຂອງເພິ່ນຫັ້ນໄປຂໍນຳຂັ້ນເທິງ,ຊິໄປຂໍຈັກໃຜແຫລະ ຊິອະນຸຍາດ. ລຸງບຸນມີໄປຂໍ 10 ເທື່ອ ຂັ້ນເທິງກໍ່ວ່າ ເຊົາໆ ເປັນຫົວໜ້າກອງຮ້ອຍ ເຕັມຫັ້ນເດ. ໝູ່ຂອງເພິ່ນພວກມານຳກັນຂັ້ນເທິງເລື່ອນຮອງກອງຮ້ອຍ, ລຸງບຸນມີ ຂວ້າມເລີຍເປັນຫົວໜ້າເລີຍ. ຂັ້ນເທິງວ່າ: ເປັນຫົວໜ້າກອງຮ້ອຍ, ດຽວນີ້ໂຮງຮຽນກົມມະດຳຕັ້ງຢູ່

ບ້ານປ່າປິ່ງເດ, ໂຮງຮຽນເຂົາເຮັດແລ້ວດຽວນີ້,ຖ້າແຕ່ນັກຮຽນມາໝົດ, ສິ່ງເຈົ້າໄປ, ໄປບັນຊາກອງຮ້ອຍເພື່ອໄປສອນໂຮງຮຽນຊຸດທີ 7! ທັງຄູສອນຍຸດທະວິທີພ້ອມ. ລຸງບຸນມີວ່າ: ອ້າວ! ມັນກໍ່ໝົດຫວັງແລ້ວ, ຂອງເພິ່ນຢາກໄປສູ້ຮົບຫັ້ນນ່າ, ເພິ່ນວ່າຕາຍກໍ່ຢ່າ, ຍັງກໍ່ຕາມ, ຂອງໝູ່ຂອງເພິ່ນໄປໝົດ. ສຸດທ້າຍເພິ່ນກໍ່ບໍ່ໄດ້ໄປ, ຮອດຫັ້ນເພິ່ນກໍ່ປະຕິບັດຕາມຄຳສັ່ງຂອງຂັ້ນເທິງ, ລຸງບຸນມີຂໍຈົນໝົດຊຸດທີ 7 ທັງເຮັດໜ້າທີ່ນາຍຄູ ຍຸດທະວິທີ ສິນລະປະຍຸດ ບັນຫາແທງກະບີບໍ່ ຫຼື ວ່າບັນຫາ ອີ່ສັງແຫລະ ມັນໝົດສິນລະປະຍຸດສອງກອງພົນ. ບາດນີ້ສ່ວນຕົວຈິງແມ່ນລຸງບຸນມີ ອັນໂຕບໍ່ເຄີຍເຮັດເພິ່ນຕີໄຂ້ຕິເຈັບ, ເຮັດແບບອ່ອນແອ, ຄືຂັ້ນເທິງລົງມາເບິ່ງບາດໃດ ລະຫົວ ຮາໆ ລຸງໄກສອນ ນັ້ນ, ໂອ້ຍ ! ນີ້ລະມັນເວນ. ຈາກຫັ້ນໝົດຊຸດທີ 7 ແລ້ວແຫລະບາດນີ້. ລຸງບຸນມີວ່າ:ມັນເປັນແນວນີ້ກໍ່ຂັ້ນເທິງຊິເອີ້ນ ເພິ່ນຍ້ອນອ້າຍເກດເປັນຜູ້ສະເໜີກັບອ້າຍ ສີສະຫວາດແກ້ວບຸນພັນ ນີ້ແຫລະເປັນເສນາທິການ. ຂັ້ນເທິງວ່າຂໍບຸນມີແດ່ ຢູ່ພະແນກສູ້ຮົບ, ບາດແລ້ວລຸງບຸນມີ ໄປນີ້ດອກຂັ້ນເທິງ ຈຶ່ງເວົ້າ ໃຫ້ຟັງ: "ກູນີ້ແຫລະສະເໜີເອົາມຶງອ້າຍສີສະຫວາດວ່າ". ລຸງບຸນມີວ່າ: "ໂອ້ຍ!ໝູ່ເຈົ້ານີ້ເນາະ ທູດພະຍາບາດເນາະ, ໂອ້ຍ! ບັກຫ່າອັນນີ້ເນາະ ສັງມາເວົ້າແບບຊັ້ນ, ລຸງບຸນມີ ບໍ່ມັກວຽກແບບນີ້ ຄັນແມ່ນເອີ້ນເພິ່ນໄປສະໜາມນີ້ ຂ້ອຍຕົບມືຕົບຕີນອີກ". ເວົ້າຂັ້ນເທິງເວລານັ້ນກໍ່ບໍ່ຄືດຽວນີ້ ຂັ້ນເທິງເວົ້າອ້າຍເວົ້ານ້ອງ, ແຕ່ດຽວນີ້ມີຍົດຊັ້ນ, ແຕ່ກີ້ກໍ່ເອີ້ນອ້າຍນ້ອງຕາມເຄີຍເປັນອິດສະຫຼະນຳກັນ. ຈັ່ງຊັ້ນລຸງບຸນມີເລີຍມາຢູ່ພະແນກສູ້ຮົບ, ສູ້ຮົບນີ້ມີອ້າຍສີສະຫວາດນີ້ ລາວຈຶ່ງເປີດບັ້ນຮົບລາດຊະວົງ, ເປີດບັ້ນຮົບອີ່ຫຍັງທີ່ວ່າໄປສະໜາມຮົບບໍ່ມີເອົາຜູ້ອື່ນ, ມີແຕ່ລຸງບຸນມີນີ້ແຫລະຜູ້ອື່ນຂັ້ນເທິງບໍ່ມັກ, ບັກສະໝອນອັນນັ້ນອັນນີ້ ຢູ່ພະແນກນຳກັນຂັ້ນເທິງຂັ້ນເທິງບໍ່ເອົາ ຖາມໂລດດຽວນີ້ ຄັນວ່າເວົ້າຕົວະກະດີ. ຈັ່ງຊັ້ນຈົນລຸງໄກສອນວ່າ "ສີສະຫວາດເອີຍ ໃຫ້ມັນພັກແດ່ ເຈົ້າເອົາຜູ້ອື່ນກໍ່ໄດ້". ບໍ່ລຸງສີສະຫວາດວ່າ ຂອງລຸງບຸນມີ ເອງມັນໄວ, ທັງບໍ່ຈັກຕາຍຄັນຊິເວົ້າ. ຄັນວ່າລຸງບຸນໄປສືບປິດສືບ ຄ້າຍຫຼັງຈາກກອງພັນເຂົາໄປແລ້ວ, ໜ່ວຍສືບຂ່າວ, ໜ່ວຍດັກກິ່ງກັບເສນາໄປແລ້ວ

ແມ່ນລຸງບຸນມີໄປ.ມັນຄືຊິແມ່ນຖືກໃຈພໍ່ລຸງສະຫຼາດແນວນັ້ນ, ລຸງບຸນມີກາຍໜ້ອຍໜຶ່ງ ກາຍບ່ອນເມຍໂຕທີສອງ ຂອງເພິ່ນ. ບາດນີ້ລຸງບຸນມີຢູ່ຫັ້ນລະເພິ່ນໄປຢູ່ເສນາທິການ ຄືເວົ້າຫັ້ນແຫລະພະແນກສູ້ຮົບນຳລຸງສີສະຫວາດ, ຈີນເຕົ້າໂຮມສອງແຂວງ ກໍ່ຈີນສົ່ງລຸງບຸນມີ ຂຶ້ນມາບາດນີ້, ສົ່ງໄປໃຫ້ບັນຊາກິດລັບ, ຊິແມ່ນຢູ່ໃນປີ 1954-1955ນັ້ນແຫລະລະຫວ່າງນັ້ນລະ, ມັນຫາກປ່ຽນເລື້ອຍໆ. ອັນວຽກລຸງບຸນມີນີ້; ໄປຮຽນກິດລັບມາບັນຊາກິດລັບ, ຂອງກອງທັບທົ່ວປະເທດຮຽນຢູ່ກັບຫັ້ນແຫລະ, ມີເພື່ອນຫວຽດນາມມາສອນ, ທັງສອນທັງບັນຊາ, ທັງເຮັດໜ້າທີ່ແຫລະມາສອນເຮັດຫຼັກການມັນຊື່ໆດອກ, ເຮັດຄືວຈິງນີ້ ແມ່ນອ້າຍນ້ອງ. ຈາກສອນກິດລັບທັງບັນຊາແລ້ວ, ລຸງບຸນມີເອົານັກຮຽນມາແຕ່ໂພນທັນ,ນັກຮຽນເດັກນ້ອຍນີ້, ທັງການເມືອງ ທັງວິຊາສະເພາະ ຫາກມີເພື່ອນຊ່ວຍວຽກນຳ. ແຕ່ວ່າເພິ່ນເຮັດຢູ່ຫັ້ນກໍ່ຂຶ້ນກັບໜ່ວຍເສນາຂອງເກົ່າ. ບາດນີ້ແລ້ວຫັ້ນປີ 1955 - 1956 ພະແນກນີ້ ຂຶ້ນກັບພະແນກທະຫານ, ເພາະວ່າເສນາມັນຢູ່ເສນາໃດ, ບາດນີ້ຂອງລຸງໄປສອນແຍກເປັນພະແນກໜຶ່ງຂອງພັກ ແລະເອົາພະແນກກິດລັບ ແລະເອົາພະແນກໂທລະເລກນີ້ ຂຶ້ນຢູ່ກັບລາວເອງຊັ້ນໃດຄາວນັ້ນ. ທາງສູນກາງຕົກລົງວ່າ ໃຫ້ຂັ້ນເທິງກວດກາ ເອກກະສານກິດລັບຕ່າງໆນີ້, ພວກລຸງບຸນມີແຕ່ງແລ້ວມັນຖືກແລ້ວ, ຂັ້ນເທິງເວົ້າວ່າສຸດໝູ່ເຈົ້າທົວໜ້າ, ອັນໃດມັນບໍ່ເສຍລັບ, ອັນໃດມັນຊິດີແລະມອບໃຫ້ໝູ່ເຈົ້າໂລດ. ຈີນຂັ້ນນັ້ນໃດຄວາມເຊື່ອໝັ້ນຂອງຂັ້ນເທິງ,ຄາວນັ້ນມີລຸງບຸນມີນີ້, ລຸງພິມມາແລະໝໍບົວສີ ຢູ່ໃນຄະນະສາມຄົນ ໜ່ວຍເຈລະຈາວຽງຈັນ [24] . ເຈົ້າຂອງລຸງບຸນມີ ກັບລຸງພິມມາ ເປັນຜູ້ຢູ່ຫັ້ນ, ຢູ່ເບື້ອງແນວຫຼັງ,ໝາຍວ່າລະຫວ່າງສູນກາງກັບວຽງຈັນຜູ້ດຽວຮັບຜິດຊອບ, ຜູ້ດຽວກວດກາ. ບາດນີ້ ລຸງພິມມານີ້ແມ່ນ 10 ແຂວງກັບແຕ່ລະກອງພັນນີ້ແມ່ນລຸງພິມມານີ້ຮັບຜິດຊອບ, ພວກເພິ່ນແບ່ງກັນແລ້ວ. ລຸງບຸນມີນີ້ຮັບຜິດຊອບໜ່ວຍກິດລັບຂອງພວກເຈລະຈາມີທາງວຽງຈັນພີ້. ຈັ່ງວ່າລຸງ

24 ຄະນະສາມຄົນໜ່ວຍເຈລະຈາລະຫວ່າງຄະນະສູນກາງແນວລາວອິດສະຫຼະກັບຝ່າຍວຽງຈັນເພື່ອຈັດຕັ້ງລັດຖະ ບານປະສົມ ປີ 1957.

ບຸນມີຢູ່ນຳ ລຸງສີສະຫວາດຢູ່ຈົນຮອດປີ 1957 ລາວລວມລາວກໍ່ໄດ້ກັບຄືນມາ,ລຸງບຸນມີເອງນີ້ບໍ່ແມ່ນ ວ່າເພິ່ນສິ່ງ, ແມ່ນຂັ້ນເທິງພາຂຶ້ນແຕ່ລະກອງຮ້ອຍແຕ່ລະກອງພັນ, ແຕ່ລະໜ່ວຍທີ່ຂັ້ນເທິງສົ່ງຄືນມາທ້ອງຖິ່ນ, ຫຼືວ່າຊິສົ່ງໄປໃສສູນກາງເພິ່ນກໍ່ບໍ່ວ່າ. ບາດນີ້ນ້ອງສາວ ລຸງບຸນມີຂຶ້ນໄປນຳ (ນ້ອງສາວຄິງໆ) ແລະກໍ່ມີນ້ອງອ້າຍຫັ້ນຜູ້ໜຶ່ງ ນ້ອເພິ່ນເຂົາຫັ້ນຂຶ້ນມາຖາມ; ອ້າຍຊິໄດ້ລົງເມືອຢູ່ບໍ? ຈັ່ງວ່ານີ້ແລ້ວ! ລຸງບຸນມີວ່າຈັ່ງວ່ານີ້ແລ້ວຍັງບໍ່ຮູ້ເດີ. ສູນກາງເພິ່ນກໍ່ສົ່ງແລ້ວ,ເວລານັ້ນຊິເຂົ້າຖາມ ສູນກາງທາງລຸງໄກສອນ ກະວົນກະວາຍ ທາງສູນກາງເວລານັ້ນບໍ່ແມ່ນຊິໄດ້ຢູ່. ບາດນີ້ລຸງບຸນມີວ່າ: ບະ! ແນວໃດກໍ່ຕາມສະນັ້ນເມືອສາຊັ້ນໜາ, ເພິ່ນເລີຍຕັດສິນໃນກັບຄືນລົງມາທ້ອງຖິ່ນ, ເພິ່ນມາໃນຄະນະທີ 1, ໃນນັ້ນອະນຸກຳມະການສູນກາງໃຫ້ລຸງບຸນມີນີ້ເປັນຫົວໜ້າ, ຂອງເມືອງຈັນທາອຸດົມ ແຕ່ກ່ອນເພິ່ນເອີ້ນເມືອງຈັນທາອຸດົມເອ ແມ່ນມອບໃຫ້ລຸງບຸນມີເປັນຫົວໜ້າ, ແລະແຂວງຈຳປາສັກແຕ່ລະເມືອງມັນແຍກເມືອງ, ເມືອງໃຜເມືອງມັນ, ບໍ່ໄດ້ປົນເວລາລົງມາ ແຍກເມືອງໃຜເມືອງມັນ, ໂຮມກັນແຂວງໜຶ່ງ. ພໍ່ອາດ ທ່ານຈູມ ເປັນຜູ້ບັນຊາການ ສົ່ງລົງຫັ້ນ, ລຸງບຸນມີຫັ້ນຮັບຜິດຊອບ ເມືອງຈັນທາອຸດົມ. ເວລານັ້ນເມຍທີສອງຂອງເພິ່ນ ຜູ້ຢູ່ບ້ານເຈີນລາຈິນຂັດຂ້ອງວ່າ ລຸງບຸນມີ ບໍ່ມານຳແຂວງສາລະວັນ. ຄວາມຈິງ ບໍ່ແມ່ນລຸງບຸນມີ ບໍ່ມານຳ ແຂວງສາລະວັນ,ຂອງເພິ່ນຖືກຈັດຕັ້ງຫັ້ນໜາ ກໍ່ເລີຍເພິ່ນເມືອພຸ້ນ. ເພິ່ນເມືອຮອດພໍ່ຮອດແມ່ພໍ່ຫັ້ນກໍ່ອອກມາແຕ່ປ່າແລ້ວ ເວລາລວມລາວ. ພໍ່ເພິ່ນຊ່ວຍວຽກເປັນປະທານເມືອງເວລານັ້ນ, ເພິ່ນຊ່ວຍວຽກຂອງແຂວງ ແມ່ເພິ່ນ ກໍ່ພາພໍ່ເພິ່ນອອກມາແລ້ວ, ອອກມາກໍ່ເຊື່ອແນ່ບໍ່ແນ່ ເພາະວ່າ ການກະທຳຂອງສັດຕູຫັ້ນໜາ, ເພິ່ນກໍ່ຢູ່ຫັ້ນມາປຶກສາກັນ, ຂອງໝົດເຮືອນລຸງບຸນມີສຳມະຊິກພັກ, ພໍ່ເພິ່ນກໍ່ແມ່ນສຳມະຊິກພັກ, ແມ່ເພິ່ນກໍ່ສຳມະຊິກພັກ, ລຸງບຸນມີກໍ່ສຳມະຊິກພັກ. ພໍ່ເພິ່ນວ່າເຈົ້າຊິເມືອຫາເມຍເຈົ້າບໍ? ດຽວນີ້ອາວເພິ່ນຊິວ່າຄັດຕະນາມຢູ່ທີ່ປາກເຊນີ້ (ເພິ່ນອອກບຳນານດຽວນີ້). ອາວເພິ່ນຄັດຕະນາມວ່າດຽວນີ້ບໍ່ໄດ້, ຕ້ອງຊ່ວຍວຽກສາຂາຂອງວິກິດໄພເສຍກ່ອນຈຶ່ງເມືອ, ມັນມີສາຂາເດ ຂອງ

ການຈັດຕັ້ງ, ຂອງການເຄື່ອນໄຫວກໍ່ເລີຍມາຊ່ວຍວຽກອາວເພິ່ນ 2-3 ເດືອນ. ອັນໃດກໍ່ມີແຕ່ພະນັກງານຝ່າຍເຮົາຕາຍ, ພວກເຮົາເຊື່ອ ບໍ່ໄດ້ກັບສັດຕູ. ຄັນມັນທຳລາຍກໍ່ໃຫ້ທຳລາຍພວກເຮົາ, ໃຫ້ພໍ່ແມ່ພວກເຮົາຍັງ, ລຸງບຸນມີກໍ່ເລີຍຂຶ້ນມາຢູ່ບ້ານເຈລະຈານີ້ແລ້ວໃນປີ 1957 ທັ້ນແຫລະ ໃນເດືອນ 11 ລຸງບຸນມີມາຕົກໃນເຈີນລານີ້ອີກ; ເພິ່ນຢູ່ເມືອງວຽງທອງນີ້ອີກ, ມາຊ່ວຍການກຽມຖິ້ມບັດເພີ້ມເຕີມເດ[25], ເພິ່ນສູ້ກັນກັບປົດປ່ອຍທ່າແຕງອີກ, ສູ້ກັນມີເປົ່າແຫລະບາດນີ້, ສູ້ກັນກາງເມືອງ ສູ້ຄູ່ຄືນກໍ່ມີຫຼາຍອັນ. ອັນຖິ້ມບັດເວລາມາເຮັດຢູ່ນີ້ເປົ້າໝາຍຂອງສັດຕູມີ 2 ຄົນ 1 ຄື ລຸງບຸນມີນີ້ 2 ແມ່ນລຸງສີ, ເພາະຈຸລາມາສ່ວນຫຼາຍເດເກືອບເຂົ້າ 10 ຄົນ ຂຶ້ນເຕົ້າໂຮມ 2 ແຂວງ ບໍ່ມາ 10 ຄົນ. ພົມມາຈຸນລາລູກເຂີຍໃນນີ້, ເປົ້າໝາຍຂອງພວກຕຳຫຼວດຂອງພວກປະຕິການນີ້ມີ ລຸງບຸນມີທີວໜ້າ, 2 ລະແມ່ນພົມມາ, ຈິນມັນເອົາທະຫານມາປະຈຳຈຸນລາ, ທັງໝາກກີໝາກກອກມັນກໍ່ມີ, ທະຫານມັນກໍ່ມີ, ເອີ! ເລື່ອງມັນຊູ່ 10 ໂມງກາງຄືນມາເອີ້ນລຸງບຸນມີ. ເພິ່ນບອກແມ່ເດັກນ້ອຍ (ເມຍເພິ່ນ) ວ່າ: "ມື້ນີ້ໝູ່ເຈົ້າຫຸ້ມຫ່ຽງເດີລຸງບຸນມີ ເວົ້າກັບພໍ່ເຖົ້າຂອງເພິ່ນວ່າ, ຂ້ອຍທັ້ນຕາຍສັດຕູຂ້າ". ພວກນີ້ເອີ້ນລຸງບຸນມີລົງມາ, ພໍ່ເຖົ້າຂອງເພິ່ນ ວ່າຢ່າລົງ! ມັນໄດ້ຍິນ: ເຈົ້າບໍ່ໃຫ້ເຂົາລົງເຈົ້າລົງມານີ້! ລຸງບຸນມີເວົ້າວ່າ: ອູຍໂຕຕາຍດີກວ່າໂສຕາຍລົງໄປ, ມັນຖືແບບຊີ້ມັນຖືປືນ. ເພິ່ນຄິດ: ເຈົ້າຢາກເຮັດຈັ່ງໃດກັບຂ້ອຍ? ເພິ່ນວ່າ: "ເຈົ້າບໍ່ຮູ້ຂ້ອຍຂຶ້ນ 2 ແຂວງ, ເຈົ້າວ່າຂ້ອຍໄປເຊື່ອງປືນ, ຂ້ອຍຂຶ້ນ 2 ແຂວງ ຂ້ອຍບອກໂລດ. ດຽວນີ້ຂ້ອຍຕຳແໜ່ງນາຍຮ້ອຍ, ດຽວນີ້ຄັນຂ້ອຍຢາກໄດ້ນາຍພົນຂ້ອຍບໍ່ມາດອອກ, ຂ້ອຍຄິດວ່າປະຕິບັດການເຊັນສັນຍາ, ຂ້ອຍບໍ່ແມ່ນມາລົບກວນໃຜໝົດ, ຂ້ອຍມາເຮັດໄຮ່ ໄຖນາຂ້ອຍ, ເຮັດຫຍັງຂ້ອຍກໍ່ເຮັດ". ມັນວ່າໃຫ້ເຈົ້າລຸງບຸນມີທັ້ນແລ້ວແກ່ນສານຖິ້ມບັດ, ລຸງບຸນມີວ່າ: ຮ້ວາຍ! ບໍ່ແມ່ນ ຂ້ານ້ອຍນີ້ເປັນຜູ້ມາຖິ້ມບັດ, ມັນແມ່ນຄຳສັ່ງພຸ້ນ ຄຳສັ່ງຂອງລັດຖະບານພຸ້ນ. ມັນວ່າຢ່າຊູ່ເວົ້າແຮງຫຼາຍຕີ ລຸງບຸນມີວ່າ: ໄປກໍ່ໄປຫາເຫຼົ້າມາກິນ. ຈາກທັ້ນມາຈິນເຮັດຈັ່ງໃດ

25 ຖິ້ມບັດ ແມ່ນຄຳເວົ້າຂອງຄົນເຂດນັ້ນ ໝາຍຄວາມວ່າປ່ອນບັດເອົາຜູ້ແທນ.

ເອົາຕ່າງແຂວງຄືໝໍ່ 10 ເອກກຳປີແຕ້ນມາປະຈຳ. ມັນມາບໍ່ໄດ້ພໍເທົ່າໃດ ກໍ່ຖືກການເມືອງພວກເຮົາແຫລະ, ຖືກການປະນີປະນອມຂອງເພິ່ນບໍ່ຍອມ. ມັນວ່າ:"ເປັນບໍ່ເປັນທະຫານນຳເຮົາ, ຊິໃຫ້ນາຍຈ່າ, ລຸງບຸນມີນາຍຈ່າຈັ່ງໃດ ຂ້ານ້ອຍນີ້ນາຍຮ້ອຍເຕັມຕົວ, ຊິໄປຍອມເອົານາຍຈ່ານຳ ສິບເອກມັນຊິໄດ້ບໍ? ບໍ່ວ່າຊິເຮັດໄຮ່ນີ້ໜາ. ສັດຕູມັນຖາມເພິ່ນມຶງບໍ່ໄປອີກບໍ? ລຸງບຸນມີວ່າ: ຮ້ວາຍ! ຄັນໝົດປະເທດນີ້ໂຕນໄປເວົ້າບໍ່ໄດ້ໃດ່ວ່າ, ບໍ່ໄດ້ໃດໝົດປະເທດນີ້ເກີດຂຶ້ນນີ້ໄປກໍ່ເປັນໄດ້ວ່າ". ລຸງບຸນມີຢູ່ຈົນມັນເລີກໜີ. ບາດນີ້ຮອດປີ 1960 ລຸງບຸນມີອອກແລ້ວບາດນີ້ ອອກໄປປ່າອີກ[26]. ເພິ່ນກວດເອົາໝົດພວກທີ່ມານຳແຕ່ 20 ປາຍຄົນໃນບ້ານຈຸນລາເອງເອົາໝົດ. ລຸງບຸນມີວ່າໄປໃຜບໍ່ຢາກຕາຍ! (ເອີຍັງບ່ອນໜຶ່ງ). ເວລານັ້ນລຸງບຸນມີເຂົ້າຄຸກ ແລະເຂົາກວດພວກ 2 ແຂວງໄປເຂົ້າຄຸກຢູ່ເມືອງທ່າແຕງຕອນເວລາມນຈັບລັດຖະບານຝ່າຍເຮົາຫັ້ນໜາ, ຈັບລຸງສຸພາຕອນນັ້ນຫັ້ນໜາ. ບາດນີ້ ຈັບທາງນັ້ນມັນກໍ່ກວດເຕົ້າໂຮມ 2 ແຂວງ ນີ້ກຳລັງປະເທດລາວນີ້ໜາມີທັງໝົດ 48 ຄົນໝົດຄົນຂຶ້ນເຕົ້າໂຮມ 2 ແຂວງ, ນອກເໜືອແຕ່ຜູ້ໜີໄປ. ກອງທ່າແຕງແມ່ນໄປໝົດໄປຂັງໄວ້, ຂັງໄວ້ຫັ້ນຄື 3 - 4 ວັນ ມັນກໍ່ບໍ່ສິ່ງໄປປາກເຊ, ບໍ່ສິ່ງໄປສາລະວັນ. ລຸງບຸນມີວ່າ: "ຮ້ວາຍຖາມວ່າຊິຂັງໄວ້ເຮັດຫຍັງ? ຄັນຊິສົ່ງໄປໃສກໍ່ສົ່ງ, ຄັນບໍ່ສົ່ງເຮັດຈັ່ງໃດ່ກໍ່ເຮັດ". ມັນເອີ້ນໄປຖາມວ່າ: ໃຜຍັງເປັນພະນັກງານລັດ, ບ່ອນໃດ່ເຈົ້າຮູ້ປືນ, ລຸງບຸນມີຕອບ, ລຸງພົມມາຍັງບໍ່ທັນຕອບ; ລຸງບຸນມີຕອບວ່າບໍ່ມີ, ບໍ່ເຊື່ອ, ຄັນບໍ່ເຊື່ອເອົາປືນມາ, ຄັນວ່າເວົ້າເກີນໄປເອົາປືນມາກັບລູກໜຶ່ງ, ຄັນນາຍລ່າມຢ້ານຍິງ, ເຈົ້ານາຍຊິຍິງໂຕເອງໃຫ້ມັນແລ້ວ, ບໍ່ຢາກຟັງ ຄັນຢາກຊິຍິງໃຫ້ມັນແລ້ວ, ຊິຍິງໃຫ້ເບິ່ງດອກ, ໂອຍ! ກ້າບໍ່;ລຸງບຸນມີ ວ່າ:ມາໂລດນ່າ ເຈົ້າວ່າຊິບໍ່ກ້າ ບໍ່ອິດສະຫຼະນີ້ມັນກ້າ! ມັນວ່າ:ໂອຍ! ກູຢອກມຶງຊື່ໆດອກ, ຄັນລຸງບຸນມີຊູຄືນມັນຫາກເປັນ

---

26 ພາຍຫຼັງຝ່າຍວຽງຈັນທຳລາຍລັດຖະບານປະສົມ, ພາຍຫຼັງລຸງສຸພານຸວົງອອກຈາກຄຸກ, ພາຍຫຼັງກອງພັນທີສອງອອກຈາກທີ່ງໄຫຫີນປີ 1959, ບັນດາພະນັກງານມາແຕ່ 2 ແຂວງ ກໍ່ພາກັນໂຕນເຂົ້າປ່າໝົດ, ທັນທິດຕໍ່ສູ້ໂດຍຄຳສັ່ງທ່ານໄກສອນ.

ຈັ່ງຊັ້ນດອກພວກບ້ານີ້. ແລ້ວອັນຊຸມມັນສິ່ງມາຍາມລຸງບຸນມີໂຄສະນາຂັບຂວາຍບໍ່, ບັກໜຶ່ງບັກເສບ ພັກເອກຈັກພັນເອກສັງແລ້ວ ບັກພັນຊື່ ລຸງບຸນມີວ່າ: ມຶງຄືສຽວກູແທ້ຄືສຽວກູຢູ່ສະຫວັນ! ກໍ່ຊິໄດ້ເປັນສຽວມັນເອົາກໍ່ເປັນສຽວ. ຊັ້ນກໍ່ເປັນສຽວກັນເລີຍຕີ້. ພໍ່ເຮົາຄືນສະຫວັນພັດວ່າອີກ, ເອົາເປັນສຽວສານບາດນີ້ມັນຖາມລຸງບຸນມີວ່າ ມຶງຢາກກິນເຫຼົ້າບໍ່! ລຸງບຸນມີວ່າຢາກຫັ້ນແລ້ວເຮີຍ! ເວົ້າຄືອີ່ສັງນີ້ ໃຜຊິບໍ່ຢາກ. ມັນວ່າກູຊິໄປເອົາເດີມຶງສູໄປໃສ, ໃຜຊິໄປໃສ,ມຶງເຊື່ອໂລດບ່າຄັນກູໂຕນມຶງເອົາບໍ່ໄດເດອກ, ມຶງຊິເຮັດຈັ່ງໃດກໍ່ເຮັດ, ບໍ່ໂຕນ, ໝໍ່ແສບພຸ້ນແມ່ນຕຳຫຼວດ ເອົາທະຫານກັບຕຳຫຼວດ ມາຍາມເທື່ອລະ 3 ຄົນ,ມັນໄປເອົາເຫຼົ້າມາກິນລຸງບຸນມີກໍ່ກິນ. ບາດນີ້ເພິ່ນຢູ່ໄປມື້ແລງຟັງເບິ່ງ! ຂອງເລືອກເອົາໃນຫັ້ນເປັນນັກສືບສອງຄົນ.ຢູ່ໃນໝູ່ຄົນ 2 ແຂວງ ນີ້ແລ້ວຈິນໄດ້ຈັບໄປສຳມະນາໝົດ. ແລ້ວບາດນີ້ຈັບເອົາເຂົາແລ້ວຜູ້ໃດແກ່ນສານຂອງຕົນ ຜູ້ໃດມັນແມ່ນຄົນຂອງໂຕເອງ, ຄັນບໍ່ປ່ອຍມື້ນີ້ມື້ແລງໃຜຢາກຕາຍແຫລະຢູ່, ໃຜບໍ່ຢາກຕາຍແຫລະໄປ. ສ່ວນບ້ານຈຸນລາແມ່ນລຸງບຸນມີເວົ້າໝົດ, ບ້ານອື່ນກໍ່ໄດ້ແມ່ຄືອ້າຍຄຳສຸກໄຊຍະແສງ ບ່ອນບໍ່ເຊື່ອໃຈເຮົາກໍ່ບໍ່ເວົ້າ, ມື້ແລງນີ້ປືນກາລະບິນ 2 ກະບອກກັບປືນກະດານ ນີ້ເອົາໄວ້ໝຽນມັນໂລດວ່າຈັ່ງຊັ້ນແຫລະ ໂສຕາຍໂລດໝາ, ລອດຫຼືບໍ່ລອດບໍ່ຈັກ, ມີແຕ່ວ່າມັນບໍ່ປ່ອຍມື້ແລງເຮັດໂລດ, ຂອງເຂົ້າປ່າເຂດນີ້ດີງລຸງບຸນມີຮູ້ໝົດ, ບ່ອນໃດເພິ່ນກໍ່ໄດ້ກິນດອກເຂົ້ານີ້ວ່າ. ລຸງບຸນມີ ວ່າໄດ້ປືນ 3 ກະບອກນີ້ ເຮັດມັນໂລດ, ບໍ່ຕ້ອງມີປືນຫຼາຍດອກ ຄາວຕໍ່ສູ້ຝຣັ່ງເດ ບໍ່ເຫັນຫຼາຍ. ບາດນີ້ຮອດມື້ອື່ນມາມັນວ່າເມືອສາ. ບາດເມືອນີ້ຈັກໃຜນໍ. ຊຽນຄຳເວົ້າວ່າ. ດຽວນີ້ປະທານ ສຸພານຸວົງ ໂຕນອອກຈາກຄຸກແລ້ວ, ຄືຊິແມ່ນໂຕນັ້ນຜິນສະທ້ອນມັນປ່ອຍລຸງບຸນມີອອກ. ມັນປ່ອຍໃຫ້ລຸງບຸນມີເມືອຍ່າງເມືອຫັ້ນແລ້ວ, ບໍ່ແມ່ນມີລົດມີລາງຄືດຽວນີ້ເພິ່ນຍ່າງແຕ່ທ່າແຕງຈິນຮອດຈຸນລານີ້, ເມືອບ້ານໃຜເມືອງມັນ. ມັນມາລັດພວກລຸງບຸນມີຢູ່ພີ້ອີກ, ຢູ່ຫວ້ຍອີ່ສັງມັນວ່າໃສໃບປົດປ່ອຍໝູ່ເຈົ້າ? ລຸງບຸນມີວ່າ: ອ່າວໄປຖາມນາຍໝູ່ເຈົ້າພຸ້ນຕີ້, ບໍ່ແມ່ນເພິ່ນເຮັດໃຫ້ໝູ່ເຮົາ. ຄັນໝູ່ເຮົາໂຕນຜີບ້າຊິຍ່າງຕາມທາງ, ໂຕນ

ຮູຂີ້ເຈົ້າຊິເຫັນກົ້ນ. ລຸງບຸນມີວ່າແບບຊີ້ແບບກົງໆ ກັບມັນ. ເພິ່ນເວົ້າອີກທ້າວບໍ່ເຫັນດອກຄັນຂ້ອຍໂຕນນີ້ ຜີບ້າບໍ?ຊິຍ່າງຕາມທາງໃຫ້ເຈົ້າເຫັນ. ບໍ່ແພ້ລຸງບຸນມີອີກ. ມັນວ່າແຕ່ຫຼິ້ນດອກຖາມຊື່ໆ, ລຸງບຸນມີວ່າ: ຖາມອີ່ສັງບໍ່ແມ່ນໜ້າທີ່ເຈົ້າ. ພວກມັນໄປເລີຍແຕ່ຫັ້ນມາຮອດເດືອນ 10 ປີ 1960 ທັນທີດ, ເວລານັ້ນລຸງບຸນມີຂໍລູກຂໍເມຍໃຫ້ເຂົາແດ່ມື້ນັ້ນ, ເມົາເຫຼົ້າແດ່ເພິ່ນເອງນີ້, ບໍ່ວ່າແຕ່ເພິ່ນແລ້ວປະຊາຊົນກໍ່ເມົາ, ພໍດີພໍ່ຍັງເປັນເຈົ້າເມືອງປາກຊ່ອງນີ້ເຂົາສົ່ງລາວມາເມືອງວຽງທອງນີ້ໜາ ເມືອງທ່າແຕງນຳເອົາກໍ່ບໍ່ຈັກດອກລາວເອົາທະຫານມາ 3-4 ຄົນ, ມີແຕ່ຄົນຕະໂອ້ຍ ໝົດດອກ; ລຸງບຸນມີຈັກເຮັດຈັ່ງໃດ ຊິໄປໄດ້ເມົາເຫຼົ້າແຮງ, ຄັນເພິ່ນໄປບໍ່ໄດ້ແມ່ນມື້ອື່ນ,ອັນຕະລາຍໃດ່ ໂອຍຕາຍ! ພວກເພິ່ນປຶກສາກັນເຮັດຈັ່ງໃດຈຳເປັນປຶກສາຫາລືກັນໄປ ຈຳນວນໜຶ່ງຢູ່ຈຳນວນໜຶ່ງ. ໄປກໍ່ຄືວ່າໄປນຳ 4-5 ຄົນ, ພວກຢູ່ຫັ້ນຕາມທີ່ຫຼັງດອກເບິ່ງສະພາບ, ລຸງບຸນມີມອບວຽກໃຫ້ເບິ່ງສັດຕູມັນຊິຊູ່ເຂັ້ນແນວໃດ, ມັນຊິເຮັດແນວໃດ, ບອກກັນ, ສົ່ງຂ່າວກັນ, ຄັນໄປໝົດນີ້ຊິມີຜູ້ສົ່ງຂ່າວຫວະ. ລຸງບຸນມີວ່າ: ດີຄືກັນໄປບໍ່ເຄື່ອນໄຫວແລ້ວ, ຄຸກບ້ານທົວເຊພຸ້ນບອກໂລດໝໍບຸນມີໂຕນແລ້ວເດີ,ໝູ່ເຈົ້າຢາກເຮັດແນວໃດກໍ່ເຮັດກັບເຮືອນເຮົາ, ມື້ນີ້ ເຈົ້າຈູດເຮືອນເຮົາ,ມື້ອື່ນເຮົາໄປຈູດເຮືອນເຈົ້າຄັນບໍ່ໄໝ້ໃຫ້ດ່າແມ່ນີ້: ລຸງບຸນມີຂຽນໜັງສືບອກມັນ, ໄທມັນວ່າເຮັດແລ້ວ, ພວກທ່ານີ້ເຮັດແລ້ວໂຕນແລ້ວມັນວ່າ. ມັນກໍ່ທັນມາກວນພວກລຸງບຸນມີອີ່ສັງ, ພວກລຸງບຸນມີ ໂຄສະນາ ກອງພັນທີ່ 2 ໂຕນອອກ, ເດັດສຸພານຸວົງ ໂຕນອອກ ແລະ ໂຄສະນາປຸກລຸກປະຊາຊົນ, ດຽວນີ້ພໍ່ແມ່ບໍ່ຕ້ອງຢ້ານ, ພວກເຮົາມີໝູ່ໜຶ່ງແລ້ວຕີສັດຕູນີ້. ຄາວນັ້ນປືນກໍ່ບໍ່ຫຼາຍດອກ 27 ຄົນມີປືນພຽງແຕ່ 8 ກະບອກໄປນຳທະຫານ. ຢູ່ບ້ານຕະກັງວ,ລຸງບຸນມີວ່າຍັງທະຫານຢູ່ບ້ານຕະກັງວເອົາໄປເອົາປືນມັນ,ປິດລ້ອມພວກມັນ,ບິບຄໍເອົາປືນມັນອີກໄດ້ 3-4 ກະບອກອີກ. ບັກໜຶ່ງ ທະຫານກົມບັງໂດມັນຢູ່ໃນພຸ້ນ, ພວກລຸງບຸນມີ ວ່າຍອມຫຼືບໍ່ຍອມ, ມຶງຊິເຮັດແນວໃດກໍ່ເຮັດໂລດ! ໄທກູຊິຈູດເຮືອນໃສ່ມຶງຊິບໍ່ຕາຍບໍ, ມື້ນີ້ທະຫານກູຮອບໝົດນີ້ມຶງຜູ້ດຽວ, ກູເປັນກອງຮ້ອຍເຮັດໂລດ ກູບອກເຈົ້າຂອງເຮືອນຈູດ

ໂລດ ກູບໍ່ໄດ້ຍ້ານດອກ. ເອີຊັ້ນກໍ່ຍອມ,ຍອມແລ້ວ! ປະປືນ, ປ່ອນລົງມາທາງ ປ່ອງຢ້ຽມ. ມັນປ່ອນປືນລົງມາ, ລຸງບຸນມີກໍ່ໂຍນລູກແຕກໃສ່! ນີ້ອອກມາບໍ? ອອກມາຍອມ, ໃສ່ໝາກແຕກກູນີ້. ທ່ານພົມມາເຮັດໂລດ, ຄົນກົດມັນຍັງໜຸ່ມ, ຈັບມັດສອກມັນ, ໂຄສະນາມັນໄປ, ອອກໄປເປັນທະຫານມາຕີກັບກູອີກ. ພົມ ມາວ່າແນວນັ້ນ. ມັນແຮງຄົນຂຸນເສິກ ຄົນດັກກົງເກົ່າເດ. ຈັ່ງວ່າ ລຸງບຸນມີ ເຄື່ອນໄຫວຢູ່ຫັ້ນ ຮອດຕົ້ນປີ 1962 ທາງເຂດເອີ້ນເພິ່ນອີກເອີ້ນ ເພິ່ນໄປບັນ ຊາ ທາງເຂດອັດຕະປື. ລຸງບຸນມີກັບເມຍເພິ່ນ, ເມຍເພິ່ນກໍ່ອອກຢູ່ນຳເດ. ເພິ່ນ ວ່າ: ຂ້ານ່າມັນຊິຂ້າ, ເວລານັ້ນ ການຄັບແຄບຂອງລຸງບຸນມີມັນກໍ່ບໍ່ຫຼາຍ, ຂອງ ຄົນໝວດດຽວໃນໄລຍະນັ້ນກໍ່ຍາກແດ່. ຈັ່ງວ່າພໍຮອດເດືອນ 10 ເພິ່ນໄດ້ຮັບ ຄຳສັ່ງ ຈາກເຂດເອີ້ນ; ເຂົາຈຶ່ງວ່າ ເຈົ້າໄປແລ້ວບຸນມີເອີຍ, ເຈົ້າອອກກໍ່ເສຍ ດາຍເຈົ້າທີ່ສຸດ, ຄັນອອກກໍ່ຍັງແຕ່ພົມມານີ້ແຫລະ, ເອີນີ້ເຮັດຈັ່ງໄດ້ທາງທ່ານ ພົມມາ ກໍ່ຢາກໄດ້ເດ, ຂັ້ນເທິງຂໍບໍ່ໄດ້ແລ້ວຄຳສັ່ງຂອງອ້າຍພົມມາ, ອ້າຍພົມ ມາ ແລະບັນຊາກັບອ້າຍພູນ ສີປະເສີດເດ. ພໍດີເດືອນ 10 ພວກລຸງບຸນມີ ຊິ ພາກັນເດີນທາງໄປທາງເຂດເລົ່າງາມພຸ້ນແຫລະ, ຊິໄປທາງອັດຕະປື ແນວມັນ ມໍ່, ຢູ່ນີ້ແຫລະໄປບໍ່ໄດ້. ເພິ່ນວ່າໃຫ້ໄປຕາມສາຍເດີ, ໄປຕາມສາຍ ກໍ່ພຸ້ນແລ້ວ ໃສ່ເລົ່າງາມພຸ້ນແລ້ວ, ແລະແບບຄືແຂນສອກນີ້ແລະທິບລົງມາໃສ່ປາກຊອງ, ຈຶ່ງອອກໃສ່ ບ້ານໝາກຫີນລາດພີ້, ອອກໄປໃສ່ບ້ານອື່ນພໍດີຖືກມັນປັດກວາດ. ພວກລຸງບຸນມີໄປຮອດກອງພັນ ທີສອງອ້າຍເກດບັນຊາ ຢູ່ຫັ້ນເພິ່ນວ່າ, ນ້ອງ ໄປແລ້ວບໍ່ໄດ້ໃດ່, ດຽວນີ້ສັດຕູພວມປັດກວາດ ທາງໜອງຊຽດຈິວ, ທາງຕີນພູ ພຸ້ນ,ລຸງບຸນມີຖາມວ່າຊິເຮັດຈັ່ງໃດອ້າຍ ພວກເຮົາຊິເອົາທະຫານໄປສິ່ງ, ຫວິດ ບ່ອນມັນປັດກວາດກໍ່ພໍດອກ. ພວກລຸງບຸນມີກໍ່ເອົາຄົນບ້ານສົ່ງພໍຮອດຫີນລາດ.

ບໍ່ແມ່ນກອງພັນທີສອງ ທີ່ໂຕນອອກຈາກທົ່ງໄຫຫີນ[27], ແມ່ນກອງພັນທີ ສອງຂອງເຂດຕັ້ງໃໝ່ ທີ່ມາເປັນກອງພັນທີສອງດຽວນີ້ຫັ້ນແລ້ວ. ຂອງເຂດມັນ

---

27 ກຸມເຂົ້າລາວ ປີ 1957, ລຸງໄກສອນໄດ້ແຕ່ງຕັ້ງໃຫ້ກອງພັນທີໜຶ່ງຕັ້ງຢູ່ ຊຽງເງິນ-ຫຼວງພະບາງ, ກອງພັນທີສອງຕັ້ງຢູ່ທົ່ງໄຫຫີນ.

ຫຼາຍຄືນສັບຊ້ອນກັນເດ, ເວລານັ້ນ ອ້າຍເກດເປັນຜູ້ບັນຊາກອງພັນ, ພໍດີໄປຮອດບ້ານໃໝ່ທີນລາດກໍ່ສອງຜົວເມຍລຸງບຸນມີນີ້ແລະຍ່າງ. ພໍດີເພິ່ນມາຮອດບ້ານກາເພີ, ແລະມີພາກສ່ວນ ລັດຖະປະຫານ ຢູ່ເລົ່າງາມນີ້ ທັງທະຫານແດ່, ທັງປົກຄອງແດ່ 4-5 ຄົນ. ພໍ່ອຸ່ນເຂົາມີປືນແນ່ລຸງບຸນມີເອງ ມີປືນສັ້ນຄັດ ແອວທີ່ນັ້ນ, ບໍ່ມີດອກປືນອີ່ສັງກັບເມຍ, ແລະເຄື່ອງຂອງພໍເຈ່ຍໄດ້, ເຂົ້າກິນພາບັກວິສອນ. ບັກວີ ແລະ ພວກ ລັດຖະປະຫານຢູ່ເລົ່າງານແລະສິ່ງເມືອເຂດ, ແລະໄປໃກ້ຈະຮອດທີນລາດ, ໄຄແດ່ໃກ້ຊິຮອດເຂດແລ້ວ, ຍັງແຕ່ຂ້ວາມເຊກອງໄປເບື້ອງນັ້ນ ກໍ່ແມ່ນບ້ານຕະງໍແລະກໍ່ແມ່ນໂລດ. ສຳນັກເຂດພັດຕິດ, ມັນອອກລາດຕະເວນ, ຕ່ອຍກັນຢູ່ໜອງບົວທາງບ້ານໃໝ່ອີກໂອຍ! ຮ້ວາຍ! ຄັນບໍ່ມີຊຸມນັ້ນໄປນຳນີ້ມັນຈັບແລ້ວພວກລຸງບຸນມີ, ຄືຊິແມ່ນຈັ່ງຊັ້ນຄັນບໍ່ຈັບກໍ່ຕາຍ. ພໍດີພວກເພິ່ນ ເຊົາມີແຮງໜ້ອຍໜຶ່ງໜາ ຢູ່ໂຄກໜອງບົວທອງທັ້ນ, ພໍດີມັນຍິງ, ຍິງຜູ້ຍາມກ່ອນພໍດີທຳຖືກ, ອັນນີ້ ຄືນຍາມກໍ່ຄືນເດັກນ້ອຍບໍ່ທັນເຄີຍ. ພໍດີບັກສີ ກັບສີສອນແລ່ນຄືນ, ສຽງປືນເຂົາຍິງກັນມັນ, ຊຸມໝູ່ເພື່ອນແດ່ ຊຸມລູກເມຍເຂົາແດ່, ແລະກໍ່ລູກເມຍລຸງບຸນມີແດ່, ເພິ່ນເຫັນເລືອດເຮ່ຍໄປ, ບໍ່ແມ່ນຖືກເຈົ້າບໍລຸງບຸນມີຖາມເມຍ, ບໍ່! ຖືກອ້າຍນ້ອງຍາມມັນແລ່ນໄປນຳເຂົາກ່ອນ, ໂອຍ! ໄຄແດ່ດອກວ່າ, ເມຍຖິ້ມບາໂລ, ລຸງບຸນມີກັບຄືນມາເອົາ, ລາວວ່າຖິ້ມໜາ! ລຸງບຸນມີ ຖິ້ມເຮັດຫຍັງ ບໍ່ມີອັນຮີ່ມບໍ່ມີອັນນຸ່ງ, ມັນບໍ່ຖືກຕາຍອີ່ສັງດອກຢາກຍິງກໍ່ຍິງ, ແລ່ນໄປພໍດີຮອດແຄມນ້ຳລຽບ ຂ້າງໜອງບົວທອງ, ອັນນັ້ນ ລຸງບຸນມີຢູ່ເຂດ, ຢູ່ທັ້ນທ້າຍປີ ຈົນຮອດປີ 1963 ໝາຍຄວາມວ່າຢູ່ເຂດນີ້ ຕີກັບສັດຕູຢູ່ອັດຕະປື ແລະ ຕ້ານການປັດກວາດຂອງສັດຕູອັດຕະປື.

ຕີກັນໄປໄຖກັນມາຢູ່ທັ້ນມີລຸງບຸນມີເປັນຫົວໜ້າກອງພັນ, ຄຳຈັນຮອງການເມືອງ, ທາກບັນຊາແມ່ນແຕ່ຜູ້ດຽວ, ຄຳຈັນເອົາກອງຮ້ອຍໜຶ່ງມາໃສ່ເມືອງອຸດົມສິນນີ້, ສິນພົງກັບລຸງບຸນມີຢູ່ທັ້ນ, ກໍ່ມີແຕ່ຢັນກັບບັກຮ້ອຍເອກກ່ຳນີ້ແລ້ວ, ມັນແຖພວກລຸງບຸນມີຮອດບ້ານໃໝ່, ພວກລຸງບຸນມີ ແຖມັນຮອດບ້ານນາຂາວ, ເຂົາເອີ້ນອີ່ສັງ (ບ້ານແກ້ງຂາມ), ແຖກັນໄປແຖກັນມາທີ່ໃດ

ແລ້ວ, ແຕ່ວ່າມີເທື່ອໜຶ່ງອ້າຍນ້ອງລຸງບຸນມີ ເຈັບ 3–4 ຄົນ, ມັນກໍ່ເຈັບຍ້ອນ ຕຸ້ມຄ້ອງພວກລຸງບຸນມີ ມັນດອກ, ຕຸ້ມຄ້ອງເຮົາກໍ່ມີ, ແປດສິບເອັດເຮົາກໍ່ມີ, ຫົກສິບກໍ່ມີ, ແຕ່ຕັ້ງບໍ່ທັນ. ຂ້ວາມແດນອັນນັ້ນ ພໍດີຊີຣອດຕີນພູ ພໍດີມັນໂຕນ ໂລດທາງໜ້າ, ໂຕນຕັກກັບພວກອ້າຍນ້ອງທະຫານລຸງບຸນມີແລ້ວ, ສັ່ງກັນມາ ຖອຍປົບ, ມັນໃກ້ຊີຣອດຖໍ້າຍາວ, ເວລານັ້ນພວກລຸງບຸນມີມີຮອດເດກາ 81 ມມ, ປືນກົນໜັກກໍ່ມີຢູ່ໃນກອງພັນຫັ້ນ, ລຸງບຸນມີເອງກໍ່ວ່າຊ່ຽວຊານ ກໍ່ບໍ່ຊ່ຽວ ຊານປານໃດດອກ, ມີແຕ່ເອົາໃຈສູ້ວ່າຊັ້ນສາ, ຊິວ່າຊ່ຽວຊານ ທາງການທະ ຫານກໍ່ບໍ່ແມ່ນ, ຂອງເສນາທິການມີແຕ່ຮຽນ, ແລະກໍ່ສໍາໃດມັນບໍ່ທໍ່ຕົວຈິງ. ຈັກ ອັນໃດຜູ້ໃຫຍ່ຈັກອັນໃດຜູ້ນ້ອຍ, ພໍດີເຈີກັນຢູ່ດອນໝາກນັດອີກ, ມັນກໍ່ສອງ ກອງຮ້ອຍ, ພວກເຮົາກໍ່ສີ່ກອງຮ້ອຍ, ພວກລຸງບຸນມີ ຫຼາຍລື່ນມັນ, ຈິນຕີບໍ່ເປັນ ໜາ. ເວົ້າກັບໝູ່ເພື່ອນເອງລ້ອມມັນໄວ້ທາງກາງເລີຍ, ເວລານັ້ນພວກລຸງບຸນມີ ຕາຍໜຶ່ງ ເຈັບ 7ຄົນ. ອ້າຍພິມມາກໍ່ເກືອບແລ້ວຂອງບັນຊາລວມ, ລຸງບຸນມີບັນ ຊາກອງພັນຮັບຜິດຊອບກອງຮ້ອຍໜຶ່ງ, ອັນນີ້ຕີຢູ່ຫັ້ນແມ່ນມັນຕາຍ 60 ຄົນ, ແຕ່ພວກເຮົາກວາດສະໜາມບໍ່ໄດ້ ປືນມັນຄືບຫັ້ນ ມັນແກ່ອອກໄປປິດບ້ານ ໃໝ່, ປືນມັນຖີ້ມລົງຮ່ອງນໍ້າ, ມັນອອກມາເອົາເລີຍຕີເຈັ່ງຢູ່ນີ້ອີກ, ຈິນເພິ່ນບໍ່ໄດ້ ຢູ່ກັບອ້າຍພິມມາ, ຂອງສັດຕູລາດຕະເວນຜ່ານທົ່ງນາເຈັ່ງ. ລຸງພິມມາວ່າ: ໄປໆ! ກຽມໆ! ປະໆ ! ປືນສັ້ນ, ເພິ່ນວ່າເອົາແຕ່ປືນຍາວ ປືນກະລາບິນໝົດ, ຫົວໜ້າແລ່ນໂລດ, ຫົວໜ້າເພິ່ນຍັງບໍ່ຢ້ານຕາຍ, ລຸງບຸນມີຊິຢ້ານຫຍັງ! ໄປໆ ນໍາໂລດແລ້ວ. ບັກວິໄລຈິນຢາກໄຫ້ ຂອງຄົນຂີ້ຢ້ານ. ຈາກຫັ້ນລຸງພິມມາ ວ່າ ດຽວນີ້ເຈົ້າເອົາກອງພັນລົງເຄື່ອນໄຫວທາງເລກທີ່13, ແລ້ວໄປເຄື່ອນໄຫວທາງ ເລກທີ13ອີກ. ນັບແຕ່ບ້ານບຸ່ງລົງຖຸງຂື້ນາກ, ເອົາກຽມເວລານັ້ນນາຍຮ້ອຍ ເສ ນາທິການເຂັດເດເປັນຜູ້ຊີ້ນໍາ, ຕິດຕາມໂດຍກົງ ບາດນີ້ນາຍຮ້ອຍແມ່ນນາຍ ວິລະພົນ (ຜູ້ຂ້າໂຕເອງຕາຍຫັ້ນ) ຫົວໜ້າການເມືອງ ນາຍຮ້ອນຫົວໜ້າການ ທະຫານ, ບັນຊາກອງພັນມີ ລຸງບຸນຍັງນີ້ ແລະ ກໍ່ສົມພົງເອົາກັນໄປໝົດກອງ ພັນນີ້ລະລັດທາງໄປຕະວາງຕະອອງພື້ ແລະ ທາງເມືອງຕະອອງພື້, ເມືອງສີ

ພັນດອນແຕ່ກ່ອນ, ເມືອງຈັນທ່າອຸດົມຕັດໃສ່ດົງກະລໍອອກໃສ່ບ້ານບຸ່ນ, ພວກລຸງບຸນມີ ໄປຫວ່າງທັ້ນແຫລະ ມີຄົນສີ່ງທາງ. ໄປຈັ່ງວ່າ ພວກເພິ່ນເຈີທັບຂອງພໍ່ພະນັກງານ ແລະແວ່ລາວຄາວໜຶ່ງ,ເສື່ອຂອງລຸງບຸນມີນີ້ ລາວວ່າລູກໄປດີ ແລະປອດໄພ, ອ້າຍນ້ອງ ເດີນທາງກ່ອນກໍ່ນຳໄປຢູ່ພຸ້ນ, ຕີກັນຢູ່ທົ່ງນາບ້ານບຸ່ນໄລ່ຂະໜາດໂຕນນ້ຳໂຕນໃນ. ໂທເວລານັ້ນ ເຂົາເອີ້ນໃສ່ວ່າ ບັກໃສກາພະ, ບັກໃສກາພະເວລານັ້ນແລະບັກນັ້ນແລ້ວເກັ່ງກ່ອນໝູ່, ບັກເສີກ ບັກວິສະນີໄລ່ມັນໂຕນນ້ຳຍ້ານຫຼາຍແລ້ວເພິ່ນແຕ່ທັ້ນມາບໍ່ທານເດ; ຕີເຂົ້າບ້ານບຸ່ງຂອງ ທາງເລກທີ 13 ມັນຢູ່ນີ້ເນາະ, ທົ່ງນາຢູ່ຕິດບ້ານ, ບ້ານມັນຢູ່ແຄມຂອງໝົດ. ທາງຝ່າຍບໍ່ອີ່ຫຼືອໍ່ຫຼໍ ບໍ່ໄດ້ກິນ ເຂົາໄປຮອດພຸ້ນທັ້ນໜາ, ທະຫານບໍ່ວ່າແຕ່ໂຕດອກແຕ່ວ່າແຕ່ງນີ້ກໍ່ແມ່ນລຸງບຸນມີເອງ ແລະບັນຊາກອງຮ້ອຍໝູ່ລ້ອຍ, ທຸມ, ກິລະພົນຊຸມອ້າຍນາຍພະນັກງານປຸກສ້າງເຂົາກໍ່ບໍ່ໄດ້ໄປແລ້ວ, ເອົາເຂົ້າບ້ານປະອາດ ບ້ານບຸ່ນພຸ້ນແລະແຖວຫ້ວຍຍາງ. ແຕ່ວ່າສະດວກແມ່ນອາຫານການກິນແຖບນັ້ນ ຢູ່ຫ້ວຍໃດຊອກຊຽດຊອກກົບກໍ່ສະບາຍ, ບໍ່ໄດ້ກິນງົວກິນຄວາຍນຳເຂົາດອກ, ຫາກິນເອງ. ເຊົາທັ້ນ ເພິ່ນກໍ່ບອກຕຽມຕີທາດຊາຍຄູນ, ເຂົາສິບສອງເທື່ອສາມເທື່ອ ກໍ່ຈັ່ງແມ່ນມັນສິບຍາກ ສິບສອງເທື່ອສາມເທື່ອ ຈຶ່ງຕັດສິນໃຈ. ໝໍສວຍວ່າຕີ,ໝໍນັ້ນຜູ້ຕັດສິນໃຈເດວ່າຕີແລ້ວຕີ, ເອົາກອງຮ້ອຍໜຶ່ງຕີ ຂຶ້ນາກເອົາກອງຮ້ອຍສອງຕີທາດຊາຍຄູນ, ລຸງບຸນມີບັນຊາກັບທ່ານກິລະພັນ. ຝ່າຍການເມືອງ ເພິ່ນໂທລະເລກກໍ່ມີ ໝາຍວ່າເຄື່ອນໄຫວຢູ່ທັ້ນ ລຸງບຸນມີຈີນໄປຍຶດສະໜາມໄດ້ແມ່ນ 4 ໂມງ, ຈຸດໜັກແມ່ນຢາກຕີເອົາຂຶ້ນາກ ພຸ້ນຕາມທິດທາງ.ຄັນວ່າຍຶດບໍ່ແຕກກໍ່ຕີຈ່ອງ. ໝໍສວຍ ມັນບໍ່ຮູ້ສັດຕູ ຂອງມັນຮູ້ຈັກໝໍນີ້, ມັນຮູ້ຈັກຊິເວົ້າເລື່ອງຂອງມັນ: ໝໍນີ້ຄົນຂີ້ລັກຂຶ້ນາກໂລພາ, ມັນທາຕີຢູ່ທັ້ນມັນມີຄັງເງິນພາສີເດຂຶ້ນາກ. ບາດນີ້ທະຫານມີແຕ່ 6 ຄົນ ໜຶ່ງທະຫານພາສີນັ້ນ, ໝໍບັນຊາກອງຮ້ອຍແຂງໆຊ້ຳໄປຕີຢູ່ທັ້ນ, ມັນຍຶດໄດ້ໝົດຢູ່ທັ້ນ. ລຸງບຸນມີນີ້ກໍ່ຊິຍຶດໄດ້ແລ້ວໜາ, ແຕ່ທາກວ່າ ຄວາມສະຫຼາດຂອງຫົວໜ້າແມ່ນທັງລຸງບຸນມີ ກໍ່ແມ່ນພໍດີບໍ່ແຕກ, ຈັບໄດ້ພາກສ່ວນມັນເມືອຢູ່ນຳລູກ ນຳເມຍ, ຈັບ

ໄດ້19 ຄົນ, ຈັບໄດ້ວິທະຍຸອີສັງແດ່ປືນແດ່, ແລະຊຸມຢູ່ເທິງນັ້ນບໍ່ແຕກ ຂອງ ຕັ້ງໄວ້ ຢູ່ແຄມນ້ຳຂອງ. ຫຼັງຈາກເພິ່ນໄປຮຽນໃໝ່ໆຢູ່ຮ່າໂນ້ຍ, ວ່າງໜຶ່ງນີ້ແລ້ວ ເພິ່ນຈຶ່ງຮູ້ຈັກວ່າເພິ່ນພັດໄປຕັ້ງແຄ້ມໄວ້ຢູ່ແຄມນ້ຳ (ຄວາມຈິງແລ້ວ ຕາມບົດ ຮຽນໄດ້ຮຽນມາ ຕັ້ງແຄ້ມແບບນັ້ນ ມັນຜິດກັບຫຼັກການ). ບາດຖອຍມັນ ຍາກ ບາດຕີບໍ່ແຕກຫັ້ນໜາ, ພັດກ່ຽວກັບການຍຸດທະວິທີ, ຈຳເປັນມັນຍິງປືນມາແຕ່ ພຸ້ນຕົກໃສ່ໂຫລະເລກມຸ່ນໝົດ. ພວກນີ້ຖອຍຖືກຕຳກັບໜ່ວຍລາດຕະເວນຂອງ ມັນ ຫາກແຕ່ວ່າປະໝົດປືນ 81 ປືນກົນໜັກ 81ມມ ກະບອກໜຶ່ງ. ຮ້ວາຍ ບາດຮອດຫົວຂົວ ເພິ່ນຖາມໃສປືນໝູ່ເຈົ້າ, ຂອງຈື່ຢູ່ເດຢູ່ເທິງພູພຸ້ນເດ. ເພິ່ນ ວ່າເຢັດແມ່ນມຶງໄປໄປນຳກັບກູໄປ. ຄັນວ່າບໍ່ເດັດ ບໍ່ຂາດແມ່ນຖິ້ມປືນຊື່ໆ, ຂອງ ມັນບໍ່ມີໂຫລະເລກອີສັງແລ້ວບາດນີ້, ມີແຕ່ຮູ້ຈັກວ່າໝໍສວຍນີ້ ຈັກອອກໄດ້ ພຽງໃດ, ສາຍຢູ່ຫາດຊາຍຄູນມີຢູ່ຮອດຂຶ້ນາກແຕ່ມັນຕັດໝົດແລ້ວໂທບໍ່ໄດ້, ແລະ ໂຫລະສັບນີ້ ຈາກຫັ້ນແລ້ວ, ມາຫາທາງນີ້ບໍ່ມາແລ້ວ, ມາບໍ່ໄດ້ແລ້ວ, ພຸ້ນແລ້ວໄປທາງຂະເໝນພຸ້ນແລ້ວ, ກຳພອກ ກຳພ້າພຸ້ນແລ້ວ, ມາສອດໃສ່ ບ້ານສົ້ມປ່ອຍ ນີ້ແຫລະ. ວິທະຍຸຫັ້ນ ບໍ່ເວົ້າແລ້ວ 10ກວ່າເດືອງ, ຢູ່ຫັ້ນຕີ ຢູ່ຫາດຊາຍຄູນ,ກໍ່ມີນາຍສວຍແຮງຄືນແນວນັ້ນຊ້ຳແຊວໆມາ. ມາແລ້ວກາງຄືນ ມາຂໍເຂົ້າທາງບ້ານກຳພອກພານີ້ແລ້ວ, ເຂົາຕຳໃຫ້ມີໝໍລຳແດ່, ແຕ່ກ່ອນມີໝໍ ລຳ ໝໍແຄນກໍໄປນຳ, ມາແລ້ວ ກໍ່ຈັດຕັ້ງແລ້ວ ໝໍສວຍຈັດຕັ້ງ, ໜ່ວຍໜຶ່ງ 6 ຄົນ ໄປກ່ອນນັບແຕ່ຟານຂຶ້ນໄປຍິງໝົດ, ຊ້າງກໍ່ຕາຍຮ້ວາຍດີໃຈແລ້ວ ພວກ ນີ້, ໄປຍິງໄດ້ງົວໂຕໜຶ່ງ, ໄດ້ຟານ 2ໂຕ, ເອົາປາດມາປາດໄວ້ຫັ້ນ. ຜູ້ມາ ຕາມຫຼັງຫາມເອົາມາຮອດບ້ານໃໝ່ພີ້. ແລະສະເລີຍເຊິກກໍ່ໄດ້ 19 ຄົນ, ທັງໃນ ນັ້ນມີສ່ງວ ລຸງບຸນມີອີກບັກໜຶ່ງ,ສ່ຽວຫັ້ນສ່ຽວຕັ້ງແຕ່ເປັນຈິວພຸ້ນ, ບັກຄຳຈັນ ບ້ານ ແກ້ງງວງຢາກໄປສະໝັກທະຫານແດງນຳຝຮັ່ງ, ມັນບໍ່ເອົາລຸງບຸນມີຕ່ຳ ກວ່າໝູ່ເດ, ໄປຈັບມາບັກກໍ່ວ່າອ້າຍມານອນຢູ່ປາກເຊປຽນ, ອ້າຍຕັນກໍ່ວ່າໄດ້ ອ້າຍ. ລຸງບຸນມີຮ້ວາຍບັກຫ່ານີ້ຈັບສອງເທື່ອແລ້ວ. ພໍດີໄປຫາໝໍຕັນຫັ້ນ,ເຮົາ ຫານີ້ບຸນມີເດີ, ແກ້ງ ເຊືອກມັນ, ໃຫ້ມັນອອກມາພີ້ມັນບໍ່ໄປໃສດອກ, ໂຕນມັນ

ຊິໂຕນລອດໃສແກ້ງງວງຫວາ. ແກ້ມັນອອກມາຈັ່ງໃດໂຕນີ້, ຈັ່ງໃດບໍ່ຊຽນໜັງສື ອອກມາໃສ່ກູແນ່, ບໍ່ຈັກແຫລະ! ບໍ່ຈັກຈັ່ງໃດຫວາບັກຜີບ້ານຶງໄປບາດນີ້ອີກ ນຶງຕາຍ, ອ່າວໄປ! ໄປນອນ, ຢາກໄປຢາກມາເວົ້າກັນເດີ ກັບບັກກຳນ້ອງ ນຶງຫັ້ນ, ຢ່າໄປທີ່ວທີບໃດຕາຍຫ່າໃດ, ອັນນີ້ມີແຕ່ລະແອໝົດໃນທະຫານນີ້, ບໍ່ ແມ່ນ ສຽວເຈົ້າ ສ່ວນຫຼາຍມີແຕ່ຄືນພູວົງ, ຄືນລະແວລະເວນ, ໄປແລ້ວບາດນີ້ ຈາກຫັ້ນມາ ໄດ້ຍິນຄຳສັ່ງອີກ ບອກບຸນມີ ດຽວນີ້ທາງເຂດຫັ້ນກຽມໝົດແລ້ວ. ລຸງບຸນມີຖາມໄປຖາມມາ ໃຫ້ກອງພັນ ທີໜຶ່ງຂຶ້ນໄປສູນກາງພຸ້ນ! ໂອຍແມ່ນລຸງ ບຸນມີເອງ, ອັນນີ້ແມ່ນຄຳສັ່ງຂອງອ້າຍຄຳຕັນວ່າຊັ້ນ, ບໍ່ໃຫ້ປ່ຽນຜູ້ບັນຊາ, ເພິ່ນ ວ່າໂອຍຈັ່ງແມ່ນມັນເວນ ຍ່າງຂຶ້ນ ຍ່າງລົງ ຫາສູນກາງກັບຊຳເໜືອ ອີກແລ້ວ. ຈຳເປັນຫັ້ນແລ້ວເພິ່ນກໍ່ກຽມ. ເມຍເພິ່ນເວລານັ້ນຖືພານີ້ ແມ່ບັກທອງຜູ້ມັນເສຍ ຫັ້ນ, ກັບອື່ນາງລູກ ໄພ້ເພິ່ນຍັງເປັນຕຳຫຼວດຢູ່ດຽວນີ້, ກັບລູກຊາຍເພິ່ນຍັງ ເປັນ ກອງບັນຊາການທະຫານແຂວງ ໄດ້ຮ້ອຍໂທເດດຽວນີ້, ບັກລູກຊາຍຫັ້ນ ຕາຍແລ້ວ ລະຫວ່າງໄປຮຽນມິກ 21 ຢູ່ຫວຽດນາມເລີຍ ຕາຍຢູ່ພຸ້ນ. ຈັ່ງວ່າ ເມຍ ເພິ່ນມານຖືພາໄດ້ 4 ເດືອນ, ແລ້ວເພິ່ນ ໂອຍຈັກຊິເຮັດແນວໃດໄດ້, ຊິ ຝາກໃຜເດ, ບໍ່ຕ້ອງຝາກບຸນມາວ່າ, ຄືໃນຫັ້ນມີຫຼາຍຄອບຄົວ, ອ້າຍສາລີ ວົງ ຄຳຊາວ, ເອີມີຄອບຄົວອ້າຍໃສຄູຄຳ ເປັນເຈົ້າເມືອງເມືອງພິນ, ເອີແລະກໍ່ມີ ເມຍ ບັກເກົ້າແດ່, ບັກສີມບູນແດ່, ຫົວໜ້າກອງຮ້ອຍຢູ່ກອງພັນຫັ້ນແລ້ວ, ຫຼາຍຄືນເມຍລຸງບຸນມີແດ່. ຂັ້ນເທີງວ່າ ເອີແນວນັ້ນກໍ່ໄດ້, ຂັ້ນເທີງໃຫ້ເພິ່ນໄປ ທາງບອກສາລະວັນເດີ, ດຽວນີ້ໃຫ້ອ້າຍນ້ອງ ເຄື່ອນທັບ ຜ່ານກະຕວດອອກສູ່ ເລົ່າງາມ, ໄປທາງສາລະວັນ, ລຸງບຸນມີວ່າຮ້ວາຍ, ມັນຊິເຈີ ກັບປິດບຶງໄຊອີກ ແລ້ວ, ເຮັດຈັ່ງໃດໄປເຈີອີ່ຫຼີ, ຈຶ່ງວ່າກັບມາຢູ່ບ້ານນີ້. ເອົາບາດນີ້ ຂັ້ນເທີງ ເພິ່ນວ່າເອົາກອງພັນທີສອງ ຕີບຶງຂາມ ບຶງໄຊໃຫ້ໄດ້, ຄັນບໍ່ສຳເລັດເອົາກອງ ພັນທີໜຶ່ງ, ເອົາໄປ, ເອົາບຸນມີເຂົ້າໄປຕີຊ່ວຍ. ພໍດີເຂົ້າໄປປິດລ້ອມຕີ, ພວກ ລຸງບຸນມີກໍ່ເດີນທາງໄປຮອດຕີນພູສະຫວ່າງ ທາງສະຫວັນ ທາງເມືອງພິນເກົ່າ. ຮອດພູໄດ້ຍິນສຽງປືນແຕກເຂົ້າໄຊຊະນະແລ້ວ. ພວກເພິ່ນໄປຮອດເມືອງພິນ

ບາດນີ້, ໄປຮອດຂົວຕາດໄຮ ພໍດີເອື້ອຍແປງພັດອອກລູກຢູ່ຫັ້ນ ໂອຍເວນອີກແລ້ວ, ເຝົ້າກັນຢູ່ຫັ້ນ ອ້າຍພໍ້ໄປຕິດຕໍ່ເອົາອ້າຍໃສ, ຕັ້ງແຕ່ຂົວຕາດໄຮເມືອງພິນບ່ອນລຸງໃສຢູ່, ແຕ່ງທະຫານໄປ, ຫາກໄຄແດ່ເພິ່ນໄດ້ຍິນສຽງກ່ອນ, ລຸງໃສເອົາລົດມາເຈີນຳທາງ, ອາເອົາຜູ້ອອກລູກໄປຮອດພຸ້ນ, ດຽວນີ້ພັກຢູ່ຫັ້ນເພິ່ນສັ່ງແລ້ວ, ຊິມີທະຫານສົມສັກ ໄຊສີງຄາມລົງໄປພົບ. ພັກຢູ່ເມືອງພິນ ພໍດີສົມສັກລົງມາ, ມາເຜີຍແຜ່ກໍ່ຄືເວົ້າຫັ້ນແລ້ວດຽວນີ້, ຜູ້ອື່ນຖ້າບໍ່ມີຄວາມຈຳເປັນບໍ່ຢູ່ກໍ່ໄດ້, ສ່ວນອ້າຍຜູ້ກຳກັບເພິ່ນ ບໍ່ທານເອີ້ນລຸງບຸນມີວ້ານ້ອງເດ, ເພິ່ນນາຍພິນຂອງລຸງບຸນມີກໍ່ນາຍພິນ, ມັນເຄີຍຂອງຄືນບ້ານທົ່ງນີ້ໜາ, ແຕ່ກ່ອນມັນເຄີຍຕິດຕໍ່ອີ່ພໍ່, ແຕ່ວ່າດຽວນີ້ຢາກໃຫ້ອ້າຍໄປ ລຸງຄຳໄຕສັ່ງ. ລຸງບຸນມີວ່າໄປເອງກໍ່ໄປນີ້ເວົ້າເລື່ອງລົດເດ, ເອີເພິ່ນວ່າໄດ້ໆພໍດີລົດລຳລຽງເຂົ້າຫວຽດຫັ້ນມາ,ຫວຽດຫັ້ນເຂົາບໍ່ຢາກເອົາ ພວກລຸງບຸນມີຈັກດີ້, ເຂົາຢາກໃສ່ພືນເມືອແຕ່ລາວເດ, ເຂົາຫາລາຍໄດ້ເຂົ້າກອງພັນເຂົາ, ບໍ່ໄດ້ສົມສັກໄປເວົ້າ, ໄປເວົ້າພໍດີດຽວນີ້, ສ່ວນແມ່ເດັກນ້ອຍ (ເມຍລຸງບຸນມີ) ກໍ່ໄດ້ 7–8 ເດືອນເຂົ້າມາ, ແລ້ວເພິ່ນວ່າສ່ວນເມຍ ລຸງບຸນມີຫັ້ນ ໃຫ້ຝາກກັບສະຫາຍໃສດອນພິງ, ບາດແລ້ວຂ້ອຍຊິໂທຕາມຫຼັງ, ວ່າສະຫາຍເປັນຜູ້ຮັບຜິດຊອບ, ວ່າມີຫຍັງເກີດຂຶ້ນ ສະຫາຍໃສຮັບຜິດຊອບກໍ່ຈຳເປັນແລ້ວ, ຈຳເປັນອີ່ຫຼືໃດອັນນີ້, ແບບປະລູກປະເມຍ ຕັດສິນໃຈອີ່ຫຼື, ເພິ່ນບອກບໍ່ໃຫ້ຢູ່ແລ້ວເຮັດຈັ່ງໃດ, ດຽວນີ້ຊ້ຳເໜືອມີຄວາມຈຳເປັນຫຍຸ້ງຍາກ. ເວລານັ້ນພວກ 585 ຄືນມັນໂຕນປ້ອມຫຼາຍເທື່ອເດ, ມັນບໍ່ມີກອງຊ່ວຍ, ໂອຍຈັດຂຶ້ນລົດ ໝົດແລ້ວ, ພໍດີ 11 ໂມງກາງຄືນ ອອກເດີນທາງຈັກຮອດ ທ່ວາງແລ້ວ. ພໍດີໄປຮອດພຸ້ນຊອດ ອອກສູນທັນ, ຈາກສູນທັນ[28], ມີກອງຮ້ອຍໜຶ່ງ ເຂົາໃຫ້ຂຶ້ນໄປເອົາປືນ, ກອງຮ້ອຍຂອງເຂດນີ້ແລ້ວ ໃຫ້ເອົາກອງຮ້ອຍປະກອບໃສ່ກອງພັນຫັ້ນພໍດີເປັນ 4 ກອງຮ້ອຍ, ເລີຍໄປເອົາກອງຮ້ອຍນັ້ນ ມີນ້າບ່າວຂອງລຸງບຸນມີບັນຊາ, ບັກບຸນ, ບັກຮ່ວມ, ບັກຫວັດ, ເຂົາ

28 ຈາມສູນທອນໝາຍຄວາມວ່າ ບ່ອນຮັບຕ້ອນພະນັກງານທະຫານລາວຢູ່ໃນດິນຫວຽດນາມ, ບ່ອນເຂດສູນທັນຕາມ ສັນຍາ ລະຫວ່າງ ຜູ້ນຳປະຕິວັດລາວ ກັບ ຜູ້ນຳພາກເໜືອຫວຽດນາມ.

ປະກອບເຂົ້າ ແລະ 3 ຄົນເຂົ້າບັນຊາກອງຮ້ອຍ. ພວກນັ້ນບໍ່ຢາກໄປ, ໝູ່ຂອງລຸງມີໜ້າທີ່ມາເອົາປືນ, ບໍ່ໄປ. ພໍດີເຫັນຊຸບເວົ້າ, ດຽວນີ້ພວກນ້ອງໄປ, ລາວຕີວະທັ້ນໜາ, ເພາະວ່າຊໍາເໜືອ ມັນຊິເກີດລັດຖະປະຫານ. ພໍດີໄປຮອດຊໍາເໜືອ ຈຸນີ້ຕິດຕາມໄປຊໍາເໜືອໃຫ້ມັນຮອດ4ກອງຮ້ອຍ ພໍໃຫ້ສູນກາງຮູ້ຈັກ, ແລ້ວພວກເຮົາຈະແຕ່ງຕັ້ງເອງໝູ່ເຈົ້າລົງມາ, ແບບເຕືອະເອົາທັ້ນໜາ. ລຸງບຸນມີວ່າໂອຍ! ຍາກແລ້ວເວລານັ້ນປະກອບປືນ, ບອກອ້າຍສະໝານແລ້ວມາຮັບຢູ່ແຄມທາງ, ປະກອບປືນດຽວນີ້ ຄັນໃຫ້ລູກປືນໃຫ້ແຕ່ພະນັກງານສາ, ສ່ວນອ້າຍນ້ອງຢ່າໃຫ້ໃດ, ເປັນຕົ້ນກອງຮ້ອຍ 4 ເອົາແຕ່ສູນທັບນີ້ໄປ. ຄັນປະກອບນີ້ອັນຕະລາຍເຊື່ອນ້ອງໂລດ.[29] ທິວໜ້າກອງຮ້ອຍກໍ່ແມ່ນນ້າບ່າວ ຂອງລຸງບຸນມີເອງນີ້, ຫາກແມ່ນຄົນຫູໜວກໜໍນັ້ນ, ຫາກເປັນທະຫານຢູ່ຄົນຫູໜວກ, ທະຫານແຕ່ 2 ແຂວງພຸ້ນລະ. ພັດມີບັກໜຶ່ງ ອຸ່ນຈັນ ຄົນອັດຕະປືນີ້ຜູ້ໜຶ່ງ, ບັກນີ້ຄືຊິແມ່ນນັກສືບພາຍໃນ, ເປັນທິວໜ້າໝວດເຄີຍປະກອບເມືອຮອດຊໍາເໜືອພຸ້ນແລ້ວ. ແຕ່ຫາກເມືອມັນຍັງບໍ່ທັນໄດ້ເຮັດອີ່ສັງດອກ, ເພິ່ນປະກອບປືນ ປະກອບສັງ, ມັນອອກມາສືບສວນ, ບອກສັ່ງກອງຮ້ອຍຫ້າວວິໄລ, ວິໄລໄປສັ່ງກັບແມ້ວຢູ່ພຸ້ນ, ເຊິ່ງເທື່ອທີສອງມັນວ່າອ້າຍບໍ່ໄປໃດ່ໃຫ້ໝູ່ເຈົ້າໄປ, ເອີນ້ອງໄປກໍ່ໄດ້, ເຮັດດີໆລຸງບຸນມີວ່າ, ຢ່າໃຫ້ເສຍປຽບໃດ່ຢູ່ເຂດໃຕ້. ເຈົ້າບັນຊາກໍ່ໄດ້ກອງຮ້ອຍໜຶ່ງ ຂອງເຈົ້າໄປຕ່ອຍກັນຢູ່ສິບສອນທັ້ນ, ໄລ່ກັນຮອດເມືອງຄໍ້ເມືອງແຂກ. ເພິ່ນວ່າຮ້ວາຍຢ່າມາໃກ້ໃດ່ ຄົນບັກນັ້ນມັນຂີ້ຄຸຍດອກ. ມັນວ່າໂຮະ ຄືສຽງຄົນເຂດໃຕ້,ນີ້ແລບັກວິໄລຫຶດລູກເຂດໃຕ້, ແລະນຶງຢ່າມາຍອກ ກໍ່ໄດ້, ໄລ່ແຕ່ສິບສອນຈົນຮອດກາງໂຄກກາງແຂ້, ເພິ່ນມີໜ້າເມືອແລ້ວ. ຈາກນັ້ນມາຕີຈອມກຸບຕີ ຄັ້ງທໍາອິດນີ້, ລະຫວ່າງທາງເຂດພູບອກ, ມັນຊິຫຽວໄປໄດ້ເດວ່າງທິວຄໍານີ້. ມັນຫວິດແລ້ວ ມັນຝັງນິນແລ້ວໜີເລີຍ. ຈັ່ງວ່າຕັດສິນໃຈ ບຸນມີດຽວນີ້ເຈົ້າຕີໃຫ້ໄດ້. ບາດນີ້ອ້າຍນ້ອງເຄີຍຕີ ແຕ່ດິນພຽງ, ໂຮ່ຈັ່ງວ່າແລ້ວເດີ

---

29 ທະຫານໃໝ່ຈາກສູນທັບເປັນທະຫານພາກໃຕ້ລາວ, ເຂົ້າມາຮັບປືນແລ້ວກັບເມືອພາກໃຕ້, ແຕ່ສູນກາງໃກ້ຂຶ້ນເມືອຊໍາເໜືອ.

ອ້າຍເອີຍ. ຮ້ວາຍຫາກກວ່າເຈົ້າເຄີຍຕີພູ, ເຄີຍຕີນ້ອງເຄີຍຕີ. ແຕ່ວ່າອ້າຍນ້ອງມີແຕ່ເຜົ່າລະແວນີ້ຈຳນວນໃໝ່ໝົດ, ຄັນເອົາຈຳນວນເກົ່າຂອງອ້າຍຈັນພຽງພຸ້ນບໍ່ໄດ້ຢ້ານດອກວ່າ. ເວົ້າກໍ່ເວົ້າຫຼິ້ນດອກ, ບໍ່ແມ່ນຖຽງກັນວ່າຈັ່ງໃດກໍ່ຕາມວ່າຊັ້ນເທາະ. 7 ປ້ອມຕີໄດ້ ແຕ່ປ້ອມດຽວ, ຄາວນັ້ນຕາຍ 2 ຄົນ ເຈັບ 7 ຄົນ. ໂອຍຄໍອ່ອນແລ້ວລຸງບຸນມີ, ບໍ່ເຄີຍເຫັນອ້າຍນ້ອງຕາຍໃນກຳມືຈັກເທື່ອ ໂອຍບໍ່ໄດ້, ໄດ້ແຕ່ຍ້ອນຫວງດບ່ອນດຽວ. ເພິ່ນວ່າເອົາໄວ້ໝວດໜຶ່ງ, ບໍ່ຊັ້ນເອົາໄວ້ໝົດ. ກອງຮ້ອຍເຮົາເອົາໄວ້ໝວດດຽວໄດ້, ເອົາສອງກອງຮ້ອຍລົງປັບປຸງ, 3 ກອງຮ້ອຍປືນໃຫຍ່, ກອງຮ້ອຍນີ້ປະໄວ້ປະຈຳປ້ອມບໍ່ໃຫ້ມັນເສຍ, ຕາຍໃຫ້ມັນຕາຍຢູ່ນີ້ໝົດ, ມັນເສຍນີ້ເຫຼືອມາຜູ້ໜຶ່ງ ແລະ ຂ້າຖິ້ມເລີຍວ່າ. ລຸງບຸນມີສັ່ງແນວນັ້ນເດ ແບບຄົນເດັດຂາດ, ເຂດໃຕ້ປາກແນວນັ້ນ, ເພິ່ນມັນເຄີຍປາກແບບນັ້ນກັບອ້າຍນ້ອງຍາມເຮັດວຽກ. ຫຼັງຈາກນັ້ນ ມາປັບປຸງ, ມາເຝິກຫັດສຶກສາອົບຮົມ, ທາງກິນແສນທາງນີ້ມາຫວງຢູ່ການເມືອງເດ, ແມ່ນແລ້ວໝໍອັນນັ້ນໜາ ສິມຫວັງຄາງບຽງ, ອັນນັ້ນແລະເປັນການເມືອງລົງ. ເພິ່ນວ່າເຮີຍ, ເຮີຍແລ່ເພິ່ນເອີ້ນລຸງບຸນມີ ສຽງເດ, ເຮັດດີໆ! ບາດນີ້ເປີດເຮົາ, ຢ່າສູ່ຈູບກູບໍ່ແມ່ນໜາ, ຄັນຈູບຫັ້ນມຶງໄປນຳວ່າ, ຈັກໃຜເອົາດີ, ຈັກໃຜເອົາບໍ່ດີ. ກູນີ້ບາດດຽວຢາກໃຫ້ມັນແຕກສະຫຼາຍໂລດແລ້ວ, ມັນຫາກເຮັດບໍ່ໄດ້. ພໍ່ເຈົ້າແມ້ວ, ຊູຊີຊີຕາຍ, ປ່ອຍຂຶ້ນບາດນີ້ເອົາລົດບໍເຕື່ອນທັບ. ບໍ່ຢາກໃຫ້ຂີ້ລົດ. ສ່ວນລູກປືນຜາເອົາບໍ່ໄດ້, ເຂົ້າປາອາຫານ ອີສັງບໍ່ໃຫ້ໃຜ, ນ້ອງບໍ່ຢາກໃຫ້ຢ່າງໃດກອງທັບ. ກອງວິຊາການແນວຫຼັງນີ້ ຢາກຂີ້ກໍ່ຂີ້ ຄືວ່າຢ່າງ. ລຸງບຸນມີຢາກຮ້າຍແຮງ, ທຳອິດຟັງສູ້ຮົບຫັ້ນໜາ ໃຜກໍ່ເຫັນດີ, ຄວາມເຫັນຈັ່ງຊັ້ນ, ເພິ່ນຖາມວ່າຈັ່ງໃດບຸນມີ, ລຸງບຸນມີຈັ່ງວ່ານີ້ແລ້ວ, ບໍ່ໄດ້ຈຳເປັນນີ້ແລ້ວ, ມັນບໍ່ທັນແໜ້ນ ເບິ່ງລາວໄປເບິ່ງອະທິບາຍໄປອະທິບາຍມາ. ເສນາທິການເອົາຈັ່ງໃດກໍ່ເວົ້າ ວ່າບັກພູກຸບບັກນີ້, ບັກນີ້ຢັນກັບເຮົາແຮງກັບປ້ອມເດີ່ນບິນພຸ້ນວ່າ: ຄັນຢັນໄດ້ເດີ່ນບິນກັບຂຸມຄອງທີ່ໜຶ່ງ, ເອີບໍ່ເປັນຫຍັງ, ເອີເຮັດຈັ່ງໃດຕາມຈິດຕາມໃຈໂຕນີ້? ນ້ອງຮັບຜິດຊອບ, ນ້ອງຢູ່ກັບກອງບັນຊາການແນວໃດກໍ່ຕາມ. ຖ້າວ່າບໍ່ແຕກຕາຍ

ມັນຕາຍຢູ່ນີ້, ບໍ່ຕາຍໃຫ້ມັນຍັງມື້ນີ້, ຈິດປັບໆລາວກໍ່ດີ, ໄດ້ແລ້ວລາວວ່າ ບໍ່ເປັນຫຍັງ. ແລ້ວຢູ່ກອງບັນຊາການແນວຫຼັງຫັ້ນ. ທ່ານຄຳໄຕຢູ່ບ່ອນຕັ້ງປືນ 120, ເບິ່ງເດີປືນ105ສອງກະບອກ, ປືນ 120 ກະບອກໜຶ່ງ, ປືນ 82 ຂອງ ຫວຽດຢາກເຂົ້າຊ່ວຍ. ຄາວໜຶ່ງມັນຍຶດກັບຫວຽດແລ້ວເດ, ຫືນຢາກຊ່ວຍ, ແຕ່ ມັນຊ່ວຍແຕ່ປືນໃຫ່ຍ 6 ກະບອກ, ຫວຽດມັນຢາກເອົາໄປປືນລ່າມ ແລະມັນ ຢາກຊ່ວຍ, ມັນຊິຫຼາຍໂພດ, ມັນປ້ອມນ້ອຍ,ຍັງ 6 ປ້ອມ ໂຮ!. ຍາກກວ່າ ໝູ່ນີ້ໂຕຖ້ຳຈອມກຸບ. ບາດນີ້ກັບອ້າຍນ້ອງເຮົານີ້ບໍ່ເຄີຍນີ້ແລະ, ໝົດທຸກຄົນໄປ ສືບຂ່າວຕົວຈິງ, ໄປສືບຂ່າວກໍ່ເບິ່ງໄດ້ຢູ່ ແຕ່ວ່າອ້າຍນ້ອງມັນບໍ່ທັນຮູ້ເດ. ພໍດີ ຕ່ອຍກັນຮອດ 3 ໂມງເຄິ່ງໝົດສາຍເຕເລໂພນບໍ່ເຖິງວ່າຊັ້ນ. ຮ້ວາຍພໍດີລາຍ ງານລູງຄຳໄຕ, ທ້າວນ້ອງຊາຍດຽວນີ້ແລ້ວໄປຕິດຕໍ່ລຸງບຸນມີ, ພໍດີເຖົ້າຫົງຄຳ ໄຊ, ດຽວນີ້ລາຍງານເພິ່ນວ່າຊິເຮັດຈັ່ງໃດ໋ຊັ້ນ? ນ້ອງຂໍນຸຍາດນ້ອງຂໍໄປເອງ, ໃຜຢູ່ຫັ້ນສິນວນບໍ່, ສາງທອງປືນໃຫ່ຍບໍ່, ອ້າວດຽວນີ້ນ້ອງຂໍໄປເອງ. ໄປພໍດີ ຮອດຕີນພູແລ້ວບາດນີ້, ພວກນັ້ນຈໍ່ຢູ່ຊຸມຄອງ, ແຕ່ພັດມີແຕ່ຄົນຂີ້ດີ້ອັນກອງ ຮ້ອຍນັ້ນກໍ່ດີ, ດຶບຂຶ້ນດຶບຂຶ້ນ, ບໍ່ມີດຶບຂຶ້ນ, ບໍ່ມີກໍ່ຕາມ, ຂອງມີໂຫລະສັບອັນ ໜຶ່ງຂອງຫວຽດໄປນຳກອງຮ້ອຍນັ້ນ ກໍ່ດີປືນຂຶ້ນຊຸມຄອງ ກອງຮ້ອຍນັ້ນ, ພໍດີ ບັກນາຍລ່າມມັນອອກມາຍ່ຽວກໍ່ຮ້ວາຍນຳໂລດແລ້ວ, ເຮັດກໍ່ລິງກັບທີ່ໂລດ ແລ້ວ, ໝາກແຕກເຂົາກໍ່ນຳຂຶ້ນຕະລຸມບອນໂລດ. ພໍດີລຸງບຸນມີຂຶ້ນຮອດຕີນພູ ບອກວ່າກູມາຮອດແລ້ວສູ, ອັນນີ້ແລະ ຍ້ອນບົດຮຽນໃຫຍ່ປ້ອມເດີ່ນບິນພຸ້ນ, ມັນຍິງແຕ່ມໍລະກົດມັນປັບໆ ປັບໆ. ລຸງບຸນມີນີ້ກໍ່ເກືອບ, ຄັນບໍ່ເກືອບກໍ່ເສັດ ໃຫ້ມັນແລ້ວ, ພໍດີຕາຍຜູ້ໜຶ່ງເຈັບ ຢູ່ໃນຫັ້ນນາຍໝວດຜູ້ໜຶ່ງ. ໂອບັກຫຽນວ່າ ເອົາເດການາໃຫ້ກູ,ເຢັດແມ່ມັນປົດຂາເດກາອອກ, ເອົາຂານ້ອຍຍັດໃສ່, ປາຍ ມັນຄານຂຶ້ນມາແລ້ວປົດຂາອອກ, ເອົາຂານ້ອຍຍັດໃສ່ລູກດຽວໂຕນປ້ອມ, ໂຕນ ປ້ອມສັ່ງຕະລຸມບ່ອນໂລດໄລ່ໂລດ, ຄັນເຈັບຄົນອີ່ສັງບໍ່ທັນວິນວາຍໄລ່ເລີຍ; ຮອດແກ້ງປາດົງເລີຍ. ແທ້ຈິງມັນບໍ່ແມ່ນຫຼາຍຄົນ, 3ຄົນ ຍິງປືນມັນຕັ້ງຊູຊີ ຄັນແມ່ນຄົນລາວໄປແລ້ວ, ແມ້ວນີ້ແມ່ນແລ້ວຊູຊີເອົາແທ້ເອົາວ່າ, ຈັ່ງວ່າຕີຫັ້ນ

ຫຼັງຈາກປົດປ່ອຍໝົດແລ້ວ, ມາແຕ່ຮຽນຢູ່ເສນາທິການໃຫ້ກຳກອງຫຼອນທົ່ວປະເທດ, ເອົາລຸງບຸນມີວ່າວຽກແບບຊີ້ ຍັງມາມອບໃຫ້ອີກແລ້ວ. ບາດນີ້ຄຳສັ່ງໃຫ້ລຸງບຸນມີໄປຮຽນ, ຮຽນບຳລຸງນາຍທະຫານຢູ່ຮ່າໂນ້ຍ, ໃນນັ້ນທຳອິດ ກໍ່ມີຊື່ລຸງບຸນມີຜູ້ໜຶ່ງ, ຊື່ລຸງບຸນມີກໍ່ກຽມແລ້ວ ຢູ່ໄດ້ບໍ່ເດືອນໜຶ່ງສອງເດືອນ, ກຽມໃຫ້ເພິ່ນ ໄປຮຽນຮ່າໂນ້ຍບຳລຸງນາຍທະຫານແທນພວກ ທ່ານພົມມາກັບຄືນເດ. ອ້າຍຈັ່ງໃດນໍດຽວນີ້ກໍ່ກຽມ, ລຸງບຸນມີຢາກຮ້າຍແຮງຖຽງກັບລຸງຄຳໄຕ, ຖຽງຄືເດັກນ້ອຍແຫລະ.

ປີ 1964 ນີ້ແລະ ລຸງບຸນມີ ຕີຢູ່ແຖວຈອມກຸບນີ້, ປີ 1964 ແລ້ວເພິ່ນກັບມາຢູ່ເສນາທິການບຳລຸງສີສະຫວາດ, ກໍ່ແມ່ນປີນັ້ນແລ້ວຫຼັງຈາກຕີໄດ້ແລ້ວ, ບາດທັ້ນລຸງບຸນມີເອົາບາໂລເອົາເຄື່ອງເອົາຂອງຂຶ້ນໝົດແລ້ວໜາຊິໄປນຳໝູ່ຊິໄປຮຽນ, ຂອງເພິ່ນມີຊື່ແລ້ວ, ຈຶ່ງວ່າຄິດໄດ້ຄິດດີຄືຊິແມ່ນທາງສູນກາງໂທໄປໃຫ້ຂັ້ນເທິງວ່າດຽວນີ້ທັ້ນບຸນມີບໍ່ທັນໄປ, ດຽວນີ້ໃຫ້ລົງມາກ່ອນ. ໂຕກໍ່ໄປແລ້ວໄປຫາເພິ່ນ, ດຽວນີ້ທັ້ນສູນກາງຊິໃຫ້ນ້ອງໄປຮຽນວຽກໜຶ່ງ, ຈັກວຽກຜີສັງບໍ່ຮູ້, ທາງອ້າຍໄກສອນພຸ້ນສັ່ງມາ. ລຸງບຸນມີເອີນ້ອງນີ້ຄັນເວົ້າຈັ່ງຊັ້ນແມ່ນບາດນີ້ແລ້ວນ້ອງຊິຖືກໂທດ, ຄັນຖືກບາດນີ້, ຄັນຕົກຊັ້ນກໍ່ຕົກບາດນີ້, ຂ້າກໍ່ແມ່ນຕາຍບາດນີ້. ບໍ່, ບໍ່ໄປຄັນຊິໃຫ້ໄປໃຫ້ນ້ອງໄປຮຽນກ່ອນຮຽນການທະຫານນີ້, ກ່ອນຮຽນບຳລຸງມີແຕ່ການທະຫານອ້ອຍຕ້ອຍ. ເພິ່ນໂທໄປຫາລຸງໄກສອນເດ. ເພິ່ນວ່າເອີໄປກໍ່ໄປເສຍ 8 ເດືອນໜຶ່ງ,ບໍ່ເທິງດອກ ຈັ່ງວ່າລຸງບຸນມີ ຈຶ່ງໄດ້ໄປນຳໝູ່, ໄດ້ໄປຮຽນ 8 ເດືອນ, ຄາວນັ້ນ ຍົນກໍ່ຖິ້ມແດ່ແລ້ວລະເບີດ. 8 ເດືອນລະບໍ່ ຮອດເດືອນທີ 4 ເພິ່ນຮຽນໄປແຕ່ເດືອນໃດໜໍ,ເດືອນ 4 ຍົນຕີພັກເຂົ້າມາແລ້ວ [30] ,ເດືອນ 7ພວກເພິ່ນປິດໂຮງຮຽນ ແລ້ວກັບມາ,ຄວາມຈິງແລ້ວຂັ້ນເທິງຢາກໃຫ້ເພິ່ນໄປຮຽນການສື່ສານທັ້ນ, ບໍ່ມອບອີກໃຫ້ກອງພັນ, ບໍ່ມອບອີກໃຫ້ການທະຫານ,ໃຫ້ເສນາມອບໃຫ້ຕິດຕໍ່ທາງດິນທາງອາກາດມອບໃຫ້ໝົດອ້າວ

[30] ໃນປີ 1964 ຍົນອາເມລິກາເລີ່ມຍິງຫຼືຖິ້ມໝາກໂບມລົງເຂດປົດປ່ອຍຂອງແນວລາວຮັກຊາດ,ຮອດເດືອນ 4 ປີ 1964 ຍົນຖິ້ມໝາກໂບມຫຼາຍຂຶ້ນ.

ບາດນີ້. ຢູ່ເສນາທິການທາກໃຫ້ພະແນກສື່ສານ, ຢູ່ໃນຫັ້ນກໍ່ມີແຕ່ລຸງບຸນມີນີ້ແຫລະ, ໝົດນີ້ແຫລະຂຶ້ນກັບນາຍພິນໄອ່ [31] ນີ້ແຫລະ, ທາກລາວຢູ່ສູ້ຮົບແຕ່ກ່ອນ, ກັບທ້າວປະກອນ, ທ້າວກ້ອນກໍ່ຢູ່ພະແນກສູ້ຮົບ. ພະແນກສື່ສານກໍ່ຢູ່ນໍ່າກັນກັບລຸງບຸນມີດອກ, ຢູ່ນາໄກ່ນີ້ເວລານັ້ນ. ຈາກຫັ້ນຍິນຕີໜັກລະນໍ, ບ່ອນໃດມັນກໍ່ຕີແລ້ວ, ກົມກອງຂອງລຸງບຸນມີຢູ່ເມືອງງານາແທ່ນນີ ກໍ່ໄດ້ຈັບນັກບິນເດ, ມັນຖືກປືນປໍ່ຕໍ່ອໍຕັ້ງແຕ່ລອງພູພີ້ແລະມັນໂຕນຈ້ອງລົງແຕ່ຍົນ. ພໍດີເຂົາຈັບ, ບຸນມີຢູ່ຫັ້ນ. ໜ່ວຍສື່ສານພວກເພິ່ນແລ້ວຈັບ. ບາດນີ້ ລຸງບຸນມີ ຢູ່ໄປຢູ່ມາໄອຈົດໝາຍ ຂອງແມ່ເພິ່ນທາງບ້ານພີ້, ແມ່ເພິ່ນໜັກທີ່ສຸດ ພໍ່ເພິ່ນກໍ່ເສຍແລ້ວ, ຈົດໝາຍວ່າ: ຄັນວ່າພໍ່ມາໄດ້ຢາກໃຫ້ລູກມາເບິ່ງແດ່, ເຈົ້າບໍ່ເຫັນພໍ່ເຈົ້າແລ້ວ, ຂ້ອຍດຽວນີ້ຢູ່ຜູ້ດຽວ, (ລາວຢູ່ທາງບ້ານຕະຂອງພຸ້ນນາຄົນຊິນເຜົ່າ). ບະເພິ່ນໃຈຄ້ອຍໆລົງແທ້ໆບາດນີ້, ເພິ່ນມາຂໍນໍາລຸງຄໍາໄຕ, ທ່ານ ຄໍາໄຕ ວ່າ: "ເອີຄັນຊິພໍ່ເມືອໄດ້ກໍ່ເບິ່ງວຽກກ່ອນ, ລຸງບຸນມີມາຄົ້ນຄວ້າເບິ່ງຂັ້ນເທິງວ່າເອີຊິພໍ່ເມືອໄດ້ຢູ່ດອກ, ທາກເຕັມທີເຈົ້າລູກສອງຄົນ, (ບັກຢູ່ຕໍາຫຼວດກັບເສຍຢູ່ຫວຽດນາມຫັ້ນ). ດຽວນີ້ຂ້ອຍຊິເຮັດໃບນໍາສົ່ງເຈົ້າຮອດແຕ່ເຂດເດີ, ແຕ່ຫັ້ນໄປເຈົ້າປຶກສານໍາທ້າວພິມມາ, ຢູ່ເຂດນໍ້າປະເຄນ; ຢູ່ນໍ້າປະຄູນຄໍາມ່ວນແດ່". ເວລາເຂດຢູ່ຫັ້ນລຸງບຸນມີຄ່ອຍໄປຊັ້ນແລ້ວຂຶ້ນຍົນກັບຂຶ້ນລົດ. ກາຍຫັ້ນໄປໝໍ່ສົມຫວັງວ່າ ມີລົດຢູ່ຫັ້ນມັນຊິລົງມາ ເຮັດວຽກຢູ່ພີ້ສະຫວັນ, ລຸງບຸນມີວ່າໄອສ່ຽວເຮົາຂໍເມືອນໍາໝາເຮົາສອງຄົນໜຶ່ງໝາ, 4 ກັບພວກເດັກນ້ອຍຕິດຕາມນີ້, ຄ່ອຍເມືອນີ້ 4 ຄົນກັບລູກເຮົານີ້. ສົມຫວັງວ່າ ບໍ່ ! ບໍ່, ກູກໍ່ໄດ້ຍິນຫັ້ນແລ້ວເພິ່ນຈັດລົດໃຫ້ມຶງກໍ່ໄປຕີກູຟ້າວ. ສົມຫວັງບໍ່ເວົ້າໜ້າເວົ້າຫຼັງ, ມັນກໍ່ອອກເດີນທາງມັນກະດາຍ. ສຸດທ້າຍລຸງບຸນມີກໍ່ມາພົບມັນຢູ່ນໍ້າປະເຄນ, ໂອຍ!

ບໍ່ແຫລ້ວພວກເພິ່ນຂີ່ລົດ ໂອຍ! ພວກເພິ່ນອອກແຕ່ສູນຫັ້ນກໍ່ມາຮອດຈະລໍ່ນີ້ ລົດຂວ້າມບໍ່ໄດ້ໝາ ຍິນຍິງຫຼາຍ, ລູກແຕກສອງຟາກຂ້າງພວກເພິ່ນບໍ່ຈັກລູກແຕກນ້ອຍບໍ່ຈັກລູກແຕກໃຫຍ່, ບົມບີອີສັງແຫລະເພິ່ນຈູງລູກໄປຊັ້ນ

---

[31] ນາຍພິນໄອ່ ເປັນຄົນຊິນເຜົ່າລະແວ.

ແລ້ວ, ເພິ່ນວ່າຕາຍກໍ່ຢ່າມັນ, ຕາຍກໍ່ຕາຍນຳກັນ. ສຸດທ້າຍເພິ່ນກໍ່ຫວິດມາຮອດຖ້ຳບ້ານປະຊາຊົນ, ມາຫັ້ນພວກເພິ່ນຈຶ່ງເດີນທາງມາກໍ່ຍາງແລ້ວ. ເພິ່ນມາຮອດເຂດກໍ່ພົບອ້າຍພົມມາ, ອ້າຍພົມມາວ່ານຳເພິ່ນນ້ອງຊິໄປລົດຫຼືໄປຍ່າງ, ຄັນໄປທາງລົດຖ້າເມືອພ້ອມບັກພອນນີ້, ບັກພອນຊິເມືອເຂດໃຕ້ທາກແຕ່ວ່າມັນສ່ຽງໄພ, ສ່ຽງໄພແນວໃດ, ຂອງຍິນຕີຢູ່ບໍ່ເຊົາບາງເທື່ອຢູ່ກາງ ທາງລົດມັນຖືກຕິດຂັດເດອັນນັ້ນອັນນີ້ເດ. ລຸງບຸນມີຄິດວ່າ: ບະຄັນເຈົ້າເມືອທາງຍ່າງນີ້ຊ້າໂພດ, ໄຄແຕ່ວ່າເມືອຕາມໃຈເຮົາແລະໄປຕາມຈຸດປະຊາຊົນ. ເພິ່ນວ່າ: ຈັ່ງໃດກໍ່ຕາມໄປຍ່າງນີ້ແຫລະ, ຕັດສິນໃຈຍ່າງມີເດັກນ້ອຍຈັ່ງໂຮງຜູ້ໜຶ່ງນິເດບັກມັນເອົາເມຍຢູ່ບ້ານໂພນບັກວິລະກອນ. ເພິ່ນມາຫາພໍ່ເຖົ້າຄຳເພັດຢູ່ບ້ານໂພນ. ນ້ອງຜູ້ໜຶ່ງມີ 3 ຄົນ, 4 ກັບລຸງບຸນມີ, 5 ກັບຄອບຄົວເພິ່ນ. ເດັກນ້ອຍເຂົາຫັ້ນແລະ ເຈ່ຍລູກເຈ່ຍເຕົ້າຊ່ວຍ. ພວກເພິ່ນມາຮອດຈະລໍ່ລັງຄັງ ຍິນຕີຄືເວົ້າຫັ້ນແລ້ວ, ພວກເພິ່ນຖິ້ມໝົດເຄື່ອງໜັກເອົາແຕ່ເຄື່ອງພໍຖືໄດ້, ແພມິນເພິ່ນປົງຢູ່ນີ້. ເຂົາວ່າ ນຳເພິ່ນພໍ່ແມ່ຖ້າເຈົ້າໃດ! ລົດມາສິ່ງຫວຽດນີ້ຄືນສະຫວັນ, ຈຳເປັນຫັ້ນແລ້ວເຂົາກໍ່ແກ້ກັນໄປ. ລຸງບຸນມີກໍ່ຜິດພໍເພິ່ນ,ອ້າວພວກເພິ່ນຈັ່ງມາຍ່າງມານີ້, ພວກເພິ່ນມາຮອດບ້ານໂພນນີ້ແຫລະ. ເພິ່ນເມືອຮອດບ້ານຈຶ່ງຢູ່ນີ້ໄລຍະຫັ້ນ; ແຕ່ຫັ້ນແລ້ວເພິ່ນກໍ່ໄປສະເໜີລຸງບົວລາງນີ້, ລຸງບົວລາງນີ້ມອບໃຫ້ສະຫາຍສີລາ, ສີລາກອງບັນຊາການຕາເວັນອອກ, ກັບສະຫາຍລະເບີຍ ຢູ່ອັດຕະປືນີ້, ຄະນະກອງບັນຊາການກັບສະຫາຍລົວ, ລົວນີ້ລາວກໍ່ເສນາທິການ ເລີຍເພິ່ນມອບລຸງບຸນມີ ໃຫ້ທາງທະຫານ, ມອບລຸງບຸນມີໃຫ້ຄະນະກອງບັນຊາການ,ແຕ່ວ່າແມ່ນການແຕ່ງຕັ້ງຖືວ່າເພິ່ນຢູ່ໃນຫັ້ນຈັ່ງຊັ້ນຈຶ່ງມາ ເຄື່ອນໄຫວຢູ່ນີ້.

ລຸງບຸນມີມາເຄື່ອນໄຫວຢູ່ນີ້ຮອດປີ 1965 - 1966, ຮອດນີ້ ແລ້ວຂອງມັນຊ້າແຕ່ປີ 1965 ເດືອນໜຶ່ງ. ພໍດີມາຊາມຊິໄດ້ສະເໜີຂັ້ນເທິງ, ຊາມຊິໃຫ້ເພິ່ນມອບວຽກງານ, ລຸງບຸນມີຈຶ່ງມາເຄື່ອນໄຫວຢູ່ນີ້, ເພິ່ນເຄື່ອນໄຫວຢູ່ນີ້ ກໍ່ໄດ້ຮັບຜິດຊອບກອງຮ້ອຍດອກ, ຖືວ່າທາງຄະນະເສນາທິການລົງຊື້ນຳກໍ່ແມ່ນພາກັນຕີພູຫົວຊ້າງນີ້, ຕີຊ່ວຍບັນລົບອີ່ສັງຕີພູຫົວຊ້າງນີ້ ພູຫຼວງບ່ອນກິ່ວໆ ຊື່

ກັບດອນຈັນນີ້ເດ. ຜູ້ຕີມີສະຫາຍລະເບີຍ, ມີສະຫາຍລິວ, ຕີບໍ່ແຕກດອກຍ້ອນສືບບໍ່ລະອຽດ, ມັນຄາໜາມໝາກຈັບມັນຍ້ອນບໍ່ມີເຄື່ອງຕັດ, ເອີ ອັນນັ້ນແລະຄຳບົງກັບລຸງຄຳຕ່ໍຮ້າຍ [32] , ຮ້າຍໃຫ້ໝໍລິວນີ້, ລິວແລະໄປສືບກັບພວກໄຊ, ກັບໝໍພີສັງຢູ່ບ້ານດ່ານນີ້ໄປສືບ, ໄປເບິ່ງແຕ່ທາງນອກສຸດທ້າຍຕີບໍ່ແຕກ. ຈາກທັ້ນມາກໍ່ໄດ້ໄຊຊະນະຫຼາຍອັນຢູ່, ມາຈົນຮອດປົດປ່ອຍທ່າແຕງ.

ປົດປ່ອຍທ່າແຕງ ປົດປ່ອຍສາລະວັນ, ປີ 1972, ປົດປ່ອຍທ່າແຕງລະຫວ່າງປີ 1971 ນີ້ແຫລະ. ທາງເມຍຜູ້ປະຈຸບັນນີ້ ເພິ່ນນີ້ກໍ່ເປັນແພດຮັບໃຊ້ສະໜາມຄືກັນ, ຄາວນັ້ນລຸງບຸນມີບໍ່ທັນເອົາກັນດອກກັບເມຍຜູ້ທີ 4 ນີ້. ລາວກໍ່ເປັນແພດໜ່ວຍເຄື່ອນທີ່ທາງທະຫານ. ບາດນີ້ພວກເພິ່ນຕີທ່າແຕງ ປິດລ້ອມທ່າແຕ່ງ, ຕີໜອງບົວ, ໜອງບົວແຕກ, ສາລະວັນຈຶ່ງປົດປ່ອຍ. ສະຫາຍລະເບີຍ ນີ້ແລະຕົວຕັ້ງຕົວຕີ. ລຸງບຸນມີປຶກສາຊື່ໆດອກ, ບໍ່ໄດ້ບັນຊາ, ຕົວຈິງສະຫາຍລະເບີຍກໍ່ຢູ່ໃນນາມກອງພັນ, ແຕ່ບັນຊາກອງຮ້ອຍແມ່ນພວກທ້າວຫງຽນພີ້ເດ, ພວກທ້າວຄຳຕານີ້ເດ, ເອີ ແລະອີ່ສັງບ້ານນາຍອງ, ຄຳຈັກ, ຢູ່ທ່າແຕງນີ້ລົງນຳກັນ ແລະປິດລ້ອມທ່າແຕງນີ້, ທັງຫວຽດທັງລາວແລ້ວບາດມັນຕາຍຫຼາຍມ່ອນແລ້ວທາງຝ່າຍເຮົາພີ້. ບາດມັນອອກກໍ່ລອດອອກ, ມັນລອດອອກທາງບ້ານໝື່ນນີ້, ລົງໃສຫາພູໄປໃສ່ໜອງບົວເລີຍ. ມັນຕາຍຫຼາຍແລ້ວຢູ່ບໍ່ໄດ້ເດ, ມັນຕາຍຫຼາຍຍ້ອນພູນີ້ເດຍິງ. ຈັ່ງວ່າຈາກທັ້ນຈຶ່ງວ່າຢຸດຍິງ, ຮອດຢຸດຍິງ. ຫຼັງຈາກທັ້ນພວກເພິ່ນຕີປາກຊອງອີສັງແລ້ວ, ມີແຕ່ກອງພັນທີສອງເຂດດອກຕີ, ລຸງບຸນມີກໍ່ບໍ່ໄດ້ບັນຊາອີສັງດອກ, ຍັງຢູ່ຕາເວັນອອກ. ຫຼັງຈາກຢຸດຍິງແລ້ວເພິ່ນເຄື່ອນໄຫວເນາະ, ເຄື່ອນໄຫວຕັ້ງແຕ່ບ້ານຫ້ວຍເລັກຫວ້ຍນ້ອຍກະຍອງພຸນເໜາະ, ສຳນັກລົງມາຢູ່. ລຸງບຸນມີມາຮອດບ້ານໂພນຈຶ່ງໄປຢູ່ແກ້ງຍາງນີ້ກັບເມຍເພິ່ນ ຜູ້ທີ່4 ຂອງເພິ່ນນີ້ແລ້ວ ມີລູກໜຶ່ງຄົນກັບເມຍນີ້. ຂອງເປັນຫຍັງຈຶ່ງເພິ່ນເອົາເມຍຈັ່ງຊັ້ນ? ເພິ່ນທັ້ນຢາກເມືອທາງພຸ້ນ, ທ່ານບົວລາງບໍ່ໃຫ້ເພິ່ນເມືອຊິຫາເມຍໃຫ້. ລຸງບຸນມີວ່າເມຍນີ້ບໍ່ທັນຢາກໄດ້, ເພິ່ນຢາກເມືອເບິ່ງແມ່ຂອງ

---

32 ລຸງລະເບີຍເຜົ່າກະຕູ່, ລຸງຄຳບຸງເຜົ່າຕະໂອຍ ແລະ ລຸງຄຳຕໍ່ເຜົ່າແງະ.

ເພິ່ນ ເມືອມີແຕ່ຖືກການປະຕິວັດ ໜ້າຕີກັນກັບສັດຕູ. ເມືອທາງອັດຕະປືກໍ່ບໍ່ໄດ້, ເມືອທາງປາກຊ່ອງກໍ່ບໍ່ໄດ້, ເຈີະແຕ່ຕີກັນ ຈັ່ງວ່າເພິ່ນໄດ້ມາເອົາເມຍຜູ້ນີ້. ຫຼັງຈາກທັ້ນມາຮອດຍຸດນີ້ພໍດີ ແຕ່ງເຂົ້າໃຫ້ຍຶດອຳນາດ, ເພິ່ນໃຫ້ລຸງບຸນມີກຽມໄປປາກເຊ, ຢຸດຍິງແລ້ວ ກຽມຍຶດອຳນາດ, ຍຶດອຳນາດແລ້ວມັນກໍ່ພໍດີຂອງເຂດພະນັກງານທັ້ນກໍ່ມາທາງນີ້, ໝູ່ເພິ່ນກໍ່ແມ່ນຄົນທ້ອງຖິ່ນດຽວກັນແມ່ນບໍ, ຫຼືວ່າເພິ່ນນີ້ ເປັນຄົນລາວປາກແຈ້ງ ປາກໃສບໍ! ທັງແມ່ນເພິ່ນເປັນຄົນບໍ່ມັກຖຽງໝູ່. ເວົ້າຜ່ານມາທາງສະຫາຍສີລາ ທາງລຸງບົວລາງວ່າ, ໃຫ້ສະຫາຍໄປກໍ່ໄດ້ປາກເຊ. ລຸງບຸນມີວ່າກໍ່ບໍ່ຢ້ານດອກ, ເພາະບ້ານຂ້ອຍເອງ, ເມືອງຂ້ອຍເອງ, ແຂວງຂ້ອຍເອງ, ບ້ານໃດຂ້ອຍບໍ່ໄປພໍດີຂ້ອຍໄປ, ໄປພຸ້ນພໍດີຂັ້ນເທິງມອບໃຫ້ເພິ່ນຢູ່ພະແນກສຳມະນາ, ເພິ່ນວ່າພະແນກອົບຮົມ, ພໍດີພວກທະຫານຂຶ້ນໄປອັດຕະປືແນ່, ພວກທະຫານທີ່ປິດອາວຸດ ປິດອີ່ສັງແລ້ວທັ້ນໄປສຶກສາອົບຮົມມາໄດ້ອີງຕູ່ບນີ້ແນ່. ພໍດີຮອດປີ 1977 ລຸງແລ້ວຫຼວງເສນາລົງມາເຂດ, ລົງມາເຫັນລຸງບຸນມີ; ໂອຍ ກູຊິເອົາມຶງນີ້ແຫລະ, ກູໄດ້ມຶງອີກແລ້ວ. ລຸງບຸນມີວ່າ: ໂອຍວ່ານໍ ຜູ້ອື່ນບໍ່ຢາກໄດ້ບໍ່ນໍ, ລຸງແກ້ວວ່າ ບໍ່ໆໆ ! ກູເມືອນີ້ກູຊິລາຍງານອ້າຍ ຄຳໄຕ. ທ່ານ ຄຳໄຕ ວ່າ ສຸດແລ້ວແຕ່ເຈົ້າ, ຄັນມັນມາມັນກໍ່ສຸດເຈົ້າ. ເຈົ້ານີ້ມີແຕ່ໄປຂາຍໜ້າຂ້ອຍນີ້ແຫລະ ລາວວ່າ. ພໍດີລາວເມືອຮອດໂພນເຄັງພຸ້ນແລ້ວ ໄປໄດ້ຍິນແລະໂຫມາ. ລຸງບຸນມີວ່າ: ໂອຍເວນອີກແລ້ວ. ທັ້ນແລ້ວສຸກັນຕິຂ້ອຍວ່າເຈົ້ານີ້ບໍ່ມີອີ່ສັງ, ເຈົ້າໄປດູຍົວະມັນບໍ່ແມ່ນມັກໃດ. ໄປນີ້ໃດ ບໍ່ມັນໃດໄປນີ້, ລຸງບຸນມີຂັ້ນເທິງເອີ້ນຊິເຮັດແນວໃດ ຄັນຂັດກໍ່ມີແຕ່ເຊົາທໍ່ນັ້ນແລ້ວຄັນຂັດຊັ້ນ ແລະໄປຢູ່ພຸ້ນອີກ. ເພິ່ນໄປຢູ່ພຸ້ນບໍ່ແມ່ນວ່າຂຶ້ນກັບພະລາທິການບໍ ກົມພະລາທິການດຽວນີ້, ຂັ້ນເທິງໃຫ້ໄປຮັບຜິດຊອບກອງພັນໜຶ່ງ ຂອງພວກສຳມະນາເຮັດບຸກເບີກຢູ່ດົງບອງທັ້ນ, ຢູ່ດົງບອງນາຄູນ ບ່ອນໜອງຍາວລຸງບຸນມີນີ້ແລະພາຕັ້ງໃຫ້ເຮັດນາລ້ຽງສັດ, ລ້ຽງໝູ, ລ້ຽງໄກ່, ລ້ຽງເປັດ. ລຸງບຸນມີໄປຮັບຜິດຊອບພວກສຳມະນາຢູ່ທັ້ນ. ປີ 1977 ຈົນຮອດ 1982 ຫາ ປີ 1983 ເພິ່ນຢູ່ທັ້ນ ໄດ້ຮຽນທິດສະດີທ່າງອນ, ເພິ່ນວ່າຢູ່ທັ້ນຮອດປີ 1977 ຈົນ

ຮອດ ປີ 1983 ຢູ່ຫັ້ນ, ໃນຫັ້ນໄດ້ຮຽນທິດສະດີທາງອນປີໜຶ່ງ, ທັງຮຽນໜັງສື ກໍ່ແມ່ນນໍ. ລຸງບຸນມີກໍ່ບໍ່ຢາກຮຽນດອກ ຂອງລະບົບເວລາເພິ່ນສອນບໍ່ແມ່ນມີແຕ່ ທິດສະດີ ຫາກຮຽນໜັງສື 6 ເດືອນ, ຮຽນວັດທະນະທຳ, ຮຽນທິດສະດີ, ລຸງ ບຸນມີກໍ່ວ່ານາຍພົນກໍ່ຫຼາຍນາຍພົນ, ນາຍພົນກຽວ ວົງເສນາ, ນາຍພົນສຸບິນ, ຫຼາຍນາຍພົນ.

ຮຽນທິດສະດີ, ປີ 1981 ນີ້ແຫລະລຸງບຸນມີຮຽນຢູ່ນັ້ນ, ໄລຍະເພິ່ນຢູ່ ສູນສຳມະນາຫັ້ນແລ້ວເຫັນບໍ່ ແຕ່ປີ 1977 - 1983 ໃນນາມຈາກສູນສຳມະ ນາຖືວ່າຮັບຜິດຊອບນີ້. ຈາກໜ້າທີ່ຮັບຜິດຊອບສຳມະນາແລ້ວ ເພິ່ນມາຮັບຜິດ ຊອບການຮຽນ. ຫຼາຍຄົນຮຽນຢູ່ຫັ້ນ, ຫຼາຍຄົນຕົກຢູ່ນັ້ນ ຍ້ອນໄຂ້ກໍ່ມີ. ລຸງບຸນມີ ຄົນແນວນີ້ບໍ່ເປັນຫຍັງ. ວັນເສົາວັນອາທິດ ແລ້ວເພິ່ນຄືນເມືອເຮືອນຫາປາມາສູ່ ໝູ່ກິນ, ຢູ່ນີ້ເພິ່ນຢູ່ນຳເຂົາ.

ເວລານັ້ນ ລຸງບຸນມີໄດ້ພົ້ນໂທແລ້ວ. ຫຼັງຈາກເພິ່ນຮຽນແລ້ວບາດນີ້ທາງ ກະຊວງບໍ່ທັນສັບຊ້ອນວຽກໃດກໍ່ຢູ່ດົງບອງວ່າຈັ່ງໃດ ເພິ່ນໄປຖາມນຳຂັ້ນເທິງ ນຳກະຊວງພີ້ແລ້ວ, ຖາມທ່ານຄຳໄຕ ຊິໃຫ້ນ້ອງຢູ່ຈັ່ງໃດ, ໃນນີ້ຜູ້ບັນຊາການ ເຂົາກໍ່ບໍ່ມີແລ້ວເດ, ເຖົ້າທິດມຸງກໍ່ຢູ່ຫັ້ນວັນທອງກໍ່ຢູ່ຫັ້ນ, ຊິໃຫ້ນ້ອງຢູ່ຈັ່ງໃດ ເພິ່ນວ່າຢູ່ຫັ້ນກ່ອນ! ລຸງບຸນມີວ່າ ໂຢະ ກ່ອນເລື້ອຍໆ ວ່າຫຼັງບໍ່ມີບໍ, ຂອງລຸງ ບຸນມີເວົ້າຢອກລາວຈັ່ງຊັ້ນ. ໂອຍ! ຮ້ອນບໍ່ຮ້ອນແລ້ວບໍ່ມີວຽກນີ້. ທ່ານຄຳໄຕ ຖາມ: ເຈົ້າຢາກໄປໃສ! ຢາກເມືອເຂດໃຕ້ພຸ້ນແຫລະ, ຢາກເມືອບ້ານເມືອ ຈຳປາສັກ. ທ່ານຄຳໄຕຖາມວ່າ:ຂ້ອຍຊິໃຫ້ເຈົ້າຂຶ້ນມາຮຽນອີກ, ຮຽນການເມືອງ ກ່ອນ. ລຸງບຸນມີເວົ້າເອົາລົງໄປຫັ້ນພັດຮຽນການເມືອງຫັ້ນອີກ ທ່ານຄຳໄຕ ເອີ ຮຽນຫັ້ນ ຢາກຫຼາຍແລ້ວ. ຫຼັງຈາກລຸງບຸນມີຮຽນ ແລະ ປິດການຮຽນການ ເມືອງ, ແລ້ວເພິ່ນຍົກຍ້າຍ ແຕ່ດົງບອງແລ້ວ ບາດນີ້ມາພັກຢູ່ດົງນາເກາະ, ເພິ່ນພັກລໍຖ້າຄຳສັ່ງຫັ້ນໜາ, ພັກໝົດຄອບຄົວຫັ້ນແລ້ວ, ຂອງເຮືອນຫັ້ນ ເຂົາກໍ່ ບໍ່ມີແລ້ວ ບ່ອນຢູ່ບ່ອນອີ່ສັງ. ທາງເຂົາກໍ່ບໍ່ມີຜູ້ບັນຊາການແລ້ວ, ຄອບຄົວເພິ່ນ ກໍ່ມາ, ມາແລ້ວຢູ່ຫັ້ນ, ທາງສຽງກໍ່ວ່າພະນັກງານທາງທະຫານນີ້ແຫລະ, ທ້າວອີ່

ສັງ,ພັນໂທອີ່ສັງ, ບັກກິຫາ໋ອິດນີ້ໃຫ້ຢູ່ໃນຄະນະແຜນວຽງຈັນ, ຄະນະແຜນວຽງຈັນ ແຕ່ກ່ອນຫັ້ນສະຫາຍຄຳໄຜ່ເດ, ສະຫາຍຄຳໄຜ່ວ່າສຽວ ສຳນັກງານເຮົາຢູ່ສີຫອມ, ໝູ່ເພິ່ນວ່າກູໃຫ້ເອົາມຶງ, ກູຂໍແລ້ວ, ກູຂໍເອົາມຶງໄປຢູ່ຄະນະນຳຫັ້ນ ລຸງບຸນມີວ່າໂອຍຢ່າໃສ່ໂທດໃສ່ກຳກູໜາ ເອົາມາໃສ່ທາງການເມືອງນີ້ກູກໍ່ອຸກ, ປົກຄອງກູກໍບໍ່ເຮັດຈັກເທື່ອ, ໃສ່ກູກໍ່ອອກແຕ່ທະຫານຄືກັນວ່າອີກ. ຈັ່ງວ່າເພິ່ນມາເຮັດຢູ່ຫັ້ນຈຶ່ງຊັບຊ້ອນໃຫ້ເພິ່ນໄປຢູ່ເມືອງເຟືອງ, ໂຮ! ເພິ່ນມາຂໍອ້າຍນາຍກາວເດ ອ້າຍປະດິດ, ເພິ່ນວ່າຈັ່ງໃດອ້າຍປະດິດ ໃຜຊັບຊ້ອນນ້ອງໄປຢູ່ເມືອງເຟືອງ, ເພິ່ນວ່າຊິໄປຫຼິ້ນກັບແມ້ວອີກໃດນີ, ຂັ້ນເທິງຖາມ: ເອົ໊າເຈົ້າບໍ່ຢາກໄປບໍ? ຢາກຈັ່ງໃດວ່າໃຜຊິຮູ້ຈັກເມືອງເຟືອງເມືອງພູດອຍ ລຸງປະດິດວ່າ: ຣ໊ວາຍຄັນວ່າເຈົ້າໄປກໍ່ສຽວເຈົ້າຫັ້ນເດຊັບຊ້ອນ, ສີພອນ ຜາລີຂັນ, ຂອງສຽວເດນາຍພົນນາຍພັນຮູ້ຫາກສຽວ. ເວລາເຂົ້າຫ້ອງການແລ້ວຈຶ່ງເອີ້ນນາຍ, ຄັນຢູ່ນອກໃຜຊິເອີ້ນສຽວໂຕເອງ, ລຸງໂຕເອງວ່າໄປຫາຕີໄປຫາສີພອນ ຜາລີຂັນພຸ້ນ, ຖາມຕີໃຜຊັບຊ້ອນ ເຈົ້າໄປເມືອງເຟືອງ, ມັນມາເຮືອນກິນເຂົ້າ ລຸງບຸນມີກໍ່ຫຼອຍໄປເຮືອນມັນໂລດ, ວ່າສີພອນເພິ່ນຊິນອນແລ້ວເດ, ໃຜມາຫາເພິ່ນຖາມປ້ອງກັນ, ລຸງບຸນມີມາຫາ. ໂອຍ ບັກຜີບ້ານີ້ມັນມາຫຍັງອີກ ລາວວ່າ,ມາກິນເຫຼົ້າຂອງຄືນເຄີຍເວົ້າກັນກັບລຸງບຸນມີ: ລຸງບຸນມີວ່າ: ມຶງມີເບຍໃຫ້ກູກິນກໍ່ກິນ: ໃຜຊັບຊ້ອນໄປຢູ່ເມືອງເຟືອງ, ເປັນເຈົ້າເມືອງເມືອງເຟືອງ? ທ່ານສີພອນວ່າ: ໂຢະ ຈັ່ງວ່ານີ້ແລ້ວລຸງບຸນມີວ່າ, ຈັ່ງວ່າແນວໃດໂຕເປັນຫົວໜ້າການເມືອງ. ເອີຫົວໜ້າຫ້ອງການເມືອງເພິ່ນວ່າ, ຈັ່ງໃດວ່າບໍ່ຈັກ ເອີ ຖາມບັກສີກ່ອນເດ, ບໍ່ກ່ອນບໍ່ຫຼັງ, ດຽວນີ້ໄປຖາມ ໂອສະກັນ, ບໍ່ໆ ! ເພິ່ນວ່າ, ລຸງສີພອນວ່າ: ໂຕຂຽນໜັງສືໃຫ້ມັນເຮົາຊິຍອມໂຕ, ຂຽນໜັງສືນ້ອຍໃຫ້ໂຕຈັ່ງຍອມວ່າໂຕບໍ່ໄດ້ອອກ. ເອີຂຽນແລ້ວໜັງສືນ້ອຍ ແລະເອົາອອກມາອ່ານກ່ອນແລະ, ໃຜຊັບຊ້ອນອ້າຍໄປຢູ່ເມືອງເຟືອງ, ນ້ອງນີ້ແຫລະ, ໂຕຜູ້ດຽວບໍ? ໄດ້ລາຍງານຫາສີພອນບໍ! ອ້າຍໂອສະກັນໄດ້ສະເໜີຢູ່, ແຕ່ອ້າຍສີພອນບໍ່ໄດ້ສະເໜີ, ໂອ, ເຈົ້າເຫັນຫົວໜ້າໃຫຍ່ເຈົ້າຢ່າໄປເຮັດຂ້ອຍ, ບໍ່ໄປຈັກດີ້, ຂັດກໍ່ຂັດ. ລຸງບຸນມີວ່າແຕ່

ຂ້ອຍເປັນທະຫານນີ້ ເທື່ອນີ້ແລ້ວຂ້ອຍຊິຂັດຄຳສັ່ງຂອງໝູ່ເຈົ້າ, ເຮັດຈັ່ງໃດກໍ່ເຮັດ, ປິດກໍ່ປິດຊັ້ນ, ບໍ່ແມ່ນພໍ່ແມ່ຂ້ອຍພາໃສ່ດາວວ່າ, ເຮັດແນວໃດກໍ່ເຮັດ, ຍອມແລ້ວ. ໂອຍ ອ້າຍໂອສະກັນ ລາວໄດ້ຍິນລາວມາແລ້ວ, ໂອຍ ບໍ່ເປັນອ້າຍຊິໄປພົບມື້ແລງ, ລຸງບຸນມີພົບກໍ່ພົບໃດອ້າຍ, ນ້ອງຊິເມືອຈຳປາສັກພຸ້ນ ຄັນບໍ່ກໍ່ເມືອຢູ່ບ້ານບໍ່ວິນບໍ່ວາຍ, ຢູ່ນຳລູກນຳເມຍຂ້ອຍ, ເງິນກໍ່ບໍ່ມີຈ້າງລົດເມືອ, ແຕ່ໄປນຳລົດມັນບໍ່ມີເດ. ຮວ້າຍບໍ່ຟ້າວຮ້ອນແມ່ອ້າຍ, ໄປກັບຄຳມອນຂາກຸດ, ດຽວນ້ອງຊິໃຫ້ອ້າຍໄປຢູ່ສາລະວັນ, ຍ້ອນວ່າທາງຈຳປາສັກມັນມີແລ້ວໃຫ້ອ້າຍໄປຢູ່ສາລະວັນພຸ້ນ, ທາງປົກຄອງຢາກໃຫ້ຂາດຕົວກັນແຕ່ພີ້: ຂ້ອຍຢາກຢູ່ທາງທະຫານ: ລຸງບຸນມີມາພໍດີ ປີ 1983 ຫັ້ນແລ້ວ ລົງມາຢູ່ສາລະວັນ: ເວົ້າຈັ່ງຊັ້ນແລ້ວມື້ອື່ນເຂົາກໍ່ຂຶ້ນຍິນໂດຍສານນີ້ແລ້ວ, ແລ້ວເພິ່ນກໍ່ມາຢູ່ສາລະວັນພີ້. ເພິ່ນມາຢູ່ສາລະວັນປີ 1984 ແບ່ງແຂວງເດ, ແບ່ງແຂວງສາລະວັນ ອອກເປັນແຂວງເຊກອງ, ອ້າຍບົວເຍັນນີ້ວ່າ ເຈົ້າຕ້ອງໄປນຳຂ້ອຍ ຂ້ອຍບໍ່ໄປນຳຂ້ອຍນີ້ ຂ້ອຍຍອມລຸງບົວເຍັນວ່າ. ບໍ່ຮູ້ຈຸດຖິ້ມໝາກແຕກໝາກມິນຫຼາຍ, ເທົ່ານີ້ພັດຖາມນຳແມ່, ເອີໄປດອກ! ໄປແລ້ວຈັດຕັ້ງລະເບີຍເປັນທົວໜ້າກວາດຄົນນຳໝູ່ນີ້ແລ້ວ,ທັງຈັບແຖວນີ້. ຈັ່ງຊັ້ນແລ້ວຈັ່ງວ່າຜູ້ໜຶ່ງອອກຢູ່ປາກເຊ,ຜູ້ໜຶ່ງອອກ ຢູ່ວຽງຈັນ, ບໍ່ເລກ3 ແລະບໍ່ເລກ4, ດຽວນີ້ຫັ້ນຈັ່ງວ່າມາຢູ່ມາກວາດໝົດນີ້, ມັນແຕກໃສ່ຕາຍຫຼາຍສິບຢູ່,ເດັກນ້ອຍຫຼິ້ນນຳໝູ່ນີ້, ບໍ່ມີສັງ ເດືອນ 6-7 ສຸດທ້າຍກໍ່ມາບໍ່ໄດ້, ຄ້າງຢູ່ກະດັບພີ້, ເຮັດແນວໃດຈັ່ງເອົາລົດດຸດໄປແກ່. ອ້າຍລະເບີຍກໍ່ລົງພື້ນຖານໄປພຸ້ນ ໄປທາງຕາແສງອິງແກ້ວ. ມີສັງພຸ້ນ, ຢູ່ນີ້ກໍ່ມີແຕ່ລຸງບຸນມີບໍ່ຮັບ, ເງິນກໍ່ແມ່ນລຸງບຸນມີເຊັນອອກຈາກຄັງ, ບໍ່ເຫັນລາຍເຊັນບໍ່ໃຫ້ທາງແສງອາລຸນພວກນີ້, ສັ່ງໄວ້ໝົດເດ; ມີແຕ່ລາຍເຊັນສະຫາຍບຸນມີເດ. ຈຳເປັນເພິ່ນມາຢູ່ນີ້ໂອຍເມື່ອຍ ວ່າງຄາວກອງປະຊຸມໃຫ່ຍຄັ້ງທີ 1 ຂອງອົງຄະນະພັກແຂວງນີ້ ວ່າບໍ່ນີ້ແລ ຜູ້ນັ່ງຢູ່ຫັ້ນຄືກັນ, ຢ່າຟ້າວໜາອ້າຍຢູ່ນຳກັນກ່ອນໜາ. ຫຼາຍຄົນພວກທອງດີສີກອງ, ອ້າຍນ້ອງບໍ່ຢາກໃຫ້ເພິ່ນພັກຜ່ອນ, ຢາກໃຫ້ເພິ່ນຢູ່ກ່ອນ, ສະໝັກກ່ອນ, ເພິ່ນວ່າສາທຸຂ້ອຍເມື່ອຍພໍແລ້ວ, ໝູ່ເຈົ້າກໍ່ເມື່ອຍຄືກັນ

ແລ້ວ, ຄືວ່າລຸງບຸນມີຍ່າງຮອດຊຳເໜືອ 2 เທື່ອແລ້ວ, ສະຫາຍບົວເຍີນກໍ່ວ່າ ຢາກຂໍ, ລຸງໄກສອນລຶງມາກໍ່ວ່າເຈົ້າສະໝັກຫັ້ນໝາບຸນມີ[33], ລຸງບຸນມີວ່າໂອຍ ອ້າຍເອີຍຂໍ! ສາທຸ. ທ່ານ ໄກສອນ ວ່າເອົາຄັນບໍ່ສະໝັກກໍ່ຢ່າ, ຢ່າສູ່ວ່າຫ້າມ ໃດ່. ເອີ ທໍ່ນີ້ເດີ! ຈຶ່ງວ່າ. ຈາກນັ້ນ ປີ 1986 ລຸງບຸນມີກໍ່ເລີຍອອກພັກຜ່ອນ ບຳນານຈົນຮອດປັດຈຸບັນນີ້. ເພິ່ນຈຶ່ງເວົ້າອີ່ສັງກໍ່ສ່ຳນີ້,ເຮືອນກໍ່ສ່ຳນີ້,ເມຍເພິ່ນກໍ່ ພັກຜ່ອນ ຍ້ອນວ່າຄົນຜ່າຕັດ.

ກ່ອນອ້າຍບົວໄຂ,ອ້າຍບົວໄຂຍັງມານຳຫຼັງບຸນມີ ມີແຕ່ວ່າບົວໄຂຍັງສະ ໝັກເດ, ອອກນຳຫຼັງ, ອອກແຕ່ປີ 1988, ຈົນມາເຖິງປະຈຸບັນນີ້. ຟັງບໍ່ໄດ້ໝາ ຈັ່ງວ່າ ລຸງບຸນມີນີ້ມັນເມື່ອຍ, ຄືຈັ່ງຊີ້ເພິ່ນຫຼິງໜ້າຫຼິງຫຼັງໄປ. ບາດນີ້ເພິ່ນເວົ້າວ່າ ຕອນເອົາເມຍຜູ້ທີ່ຖືພາຂຶ້ນໄປຊຳເໜືອຫັ້ນ ຜູ້ທີສາມ, ຜູ້ທີສອງເພິ່ນຫັ້ນມາ ເຄື່ອນໄຫວຢູ່ເມືອງວຽງທອງ ລຸງຄຳສຸກ ໄຊຍະແສງ ເປັນເຈົ້າເມືອງ ເລີຍໃຫ້ ເພິ່ນເອົານາງນີ້ ນາງຜູ້ທີສອງຫັ້ນ, ຫຼັງຈາກພວກເພິ່ນມາແຕ່ສອງແຂວງຫັ້ນ ລາວອອກລູກລາວເລີຍເສຍ, ຍັງລູກຜູ້ໜຶ່ງລູກກົກດຽວນີ້, ຍັງລູກສາວລູກທີ ສອງ.

ລຸງບຸນມີແຕ່ງເມຍຜູ້ທີສອງປີ 1950 ເພິ່ນເອົາຍ້ອນວ່າລູກພະນັກງານ ແດ່, ທັງອ້າຍຄຳສຸກ ໄຊຍະແສງນີ້ແລ້ວ, ເພິ່ນວ່າເອົາກໍ່ເອົາສະ, ເພິ່ນວ່າເອົາ ກໍ່ປານວ່າບໍ່ແມ່ນເອົາດອກ, ເພາະວ່າເອົາແລ້ວກໍ່ເອົາກອງທະຫານຂຶ້ນຊຳເໜືອ, ເອີ! ເພິ່ນເອົາແລ້ວຂຶ້ນຊຳເໜືອເລີຍ. ບາດນີ້ລາວຢາກເມືອເຕົ້າໂຮມນຳລຸງບຸນມີ ຫັ້ນ ແມ່ລາວບໍ່ໃຫ້ໄປ, ຈັ່ງວ່າລະຫວ່າງລາວລວມລາວ ສັດຕູເອົາລາວໄປຂູ່, ຍິງປາບຢູ່ປ່າພຸ້ນ, ແຕ່ລາວກໍ່ບໍ່ຍອມເວົ້າອີ່ສັງ, ຫຼັງຈາກນັ້ນທັນທີດເພິ່ນຈຶ່ງເອົາ ຜູ້ທີສາມ, ລູກຜູ້ທີ່ເສຍຢູ່ຫວຽດນາມນີ້ ກັບຜູ້ຍັງຢູ່ຕຳຫຼວດດຽວນີ້ຫັ້ນ. ເມຍຂອງ ຜູ້ທີສາມ ຫຼືວ່າລາວເປັນຍ້ອນສົງຄາມໜັກ ລຸງບຸນມີ ກໍ່ບໍ່ໄດ້ເອົາໃຈໃສ່ປານໃດ ຫວ້ານຢາຫານັງ ໂຮງມິດໂຮງໝໍບໍ່ໄດ້ໄປຍ້າຍບ່ອນຢູ່ເລື້ອຍໆ. ໂຮງໝໍຢູ່ທ່າກຸດ

---

33 ນາຍພົນປະດິດກຽງຄຳ ເຜົ່າລະລາວຢູ່ອັດຕະປື, ໃນປີ 1952 - 1953 ເພິ່ນບັນຊາກອງ ໄຊຈັກກະພັດຢູ່ພາກໃຕ້ລາວ ພ້ອມກັບແກ້ວຫຼວງ.

ທັ້ນ, ຢູ່ທ່າກຸດບ້ານກິກໄຣ, ຂອງລຸງບຸນມີບໍ່ໄດ້ມາ, ຂອງເພິ່ນກໍ່ວິນເສິກວິນເສືອ. ເມຍເພິ່ນເປັນພິກເປັນບວມເລີຍເສຍ. ເມຍເພິ່ນຜູ້ນີ້ເປັນແພດ, ຂອງເພິ່ນຮູ້ວ່າເມຍເຈັບລາວກໍ່ລົງໄປບ້ານທັ້ນ, ແພດເຄື່ອນທີ່ຂອງເຂົາ. ຈັ່ງວ່າເມຍເພິ່ນເສຍແລ້ວລາວບາດນີ້ ແລ້ວຄືເພິ່ນເວົ້າວ່າຢາກໜີແລ້ວ, ຢາກເມືອແລ້ວໃດ່ຈຶ່ງໄດ້ເອົາຜູ້ນີ້ (ເມຍທີ 4).

ເມຍເພິ່ນຜູ້ທີສາມ ມີລູກສາມຄົນ, ຊາຍສອງຍິງໜຶ່ງ, ໝໍຜູ້ທີສາມທັ້ນມັນອອກຢູ່ຄຳສະອີ ຫວງດນາມ, ອີ່ນີ້ຕໍາຫຼວດດຽວນີ້ທັ້ນອອກຢູ່ນາ, ໄກໂຮງໝໍ, ນາຄ່າພຸ້ນ, ໝໍຢູ່ເວີນຄາມນີ້ກໍ່ອອກຢູ່ບ້ານ.

ເມຍເພິ່ນຜູ້ທີສີ່ ມີລູກໜຶ່ງຜູ້ຍິງ. ຍ້ອນຢູ່ນີ້ເທິງນໍ, ຂັ້ນເທິງເຈົ້າແຂວງເຈົ້າເມືອງກໍ່ມີແຕ່ຄົນໂຕເອງ ບາດນີ້ລຸງບົວລາງ ກໍ່ແມ່ນພີ່ນ້ອງ, ຂອງລາວນີ້ເປັນພີ່ນ້ອງພໍ່ເຖົ້າບົວລາງ. ທັງຄາດທັງໄຖແລ້ວ. ເພິ່ນມາຫາຜູ້ນີ້ໃຫ້, ເພິ່ນເອົາຜູ້ນີ້ມາຕັ້ງແຕ່ປີ 1974 ມີລູກຊາຍກໍ່ໄດ້ອາຍຸ 28 ປີ. 4 ຄົນ ເພິ່ນເອົາເມຍນີ້ສະນັ້ນເພິ່ນເຫັນວ່າມີຄວາມຫຍຸ້ງຍາກຫຼາຍ. ເພິ່ນວ່າໂອຍມາຂໍນໍາ, ມາຂໍເຮັດໝັນເມຍນີ້, ທ່ານໝໍທັ້ນເຖົ້າແຮງນີ້, ລຸງບຸນມີນີ້ກໍ່ແມ່ດຽວ. ທ່ານໝໍວ່າເອີຍ, ພີ່ອ້າຍເອີຍເຮັດໝັນສາ. ແລະກໍ່ມີຜູ້ຊາຍຍູ້ເມຍເພິ່ນໜາ, ເລີຍລຸງບຸນມີວ່າໂອກໍ່ແມ່ນໃດ່ ຈັ່ງໄດ້ເຮັດ, ເຮັດໝັນເຖົ້າເຮັ່ງບໍ່ຢາກເຊັ່ນ, ບໍ່ຢາກເຊັ່ນເຈົ້າລ້ຽງເອົາຄັນມາໄດ້ມາບາດນີ້ເຈົ້າເອົາຂ້ອຍບໍ່ເອົາ, ມັນຍາກຫຼາຍຄົນແລ້ວ, ລາວວ່າ ຈັ່ງແມ່ນເວນ, ບໍ່ແມ່ນເວນລຸງບຸນມີວ່າໄປອອກໃຫ້ທ່ານໝໍຜູ້ເຂົ້າຫ້ອງຜ່າຕັດທັ້ນພັດກັກໃບອັນນັ້ນ ໂຢະ!ລຸງບຸນມີຄິດ, ຢູ່ໃສໃບອັນນັ້ນລຸງບຸນມີຖາມນັ້ນ, ຢູ່ນໍາທ່ານໝໍພຸ້ນ ທ່ານໝໍຜ່າຕັດ. ລຸງບຸນມີ ຖາມວ່າປ້າເຈົ້າເທິງປານໃດ ຈັກໂມງຊິເອົາເຂົ້າຫ້ອງຜ່າຕັດ, ໂຢະ ໂຢະ ຫຼິງແລ້ວ, ເຮັດຕິຫຼິງແລ້ວ, ເອົາເຂົ້າຫ້ອງຜ່າຕັດຈຶ່ງໄດ້ຜ່າຕັດໃດ. ກໍ່ລາວຊິໂຊອີ່ສັງທັ້ນກໍ່ຄືຮູ້ນີ້ແລ້ວແມ່ຍິງນີ້, ຄົນຜູ້ນີ້ຄົນກໍ່າພ້າ ກໍ່າພອຍ ແບບວ່າຄົນທຸກຍາກ, ບາດນີ້ອາຍຸໂຕ 24 ປີ ໂຕເຮັດໝັນ, ລຸງບຸນມີເອົາລາວແຕ່ອາຍຸ 19 ປີ. ຈັ່ງຊັ້ນແຫລະຄົນເຄີຍທຸກອອກແຮງງານ, ເມຍລາວບໍ່ຮັກສາໂຕເອງລາວຈຶ່ງໂຊນີ້. ທໍາມະດາ ເຈົ້າເຮັດໝັນອາຍຸ

ແກ່. ລູກເພິ່ນເຮັດໝັ້ນອີ່ນັ້ນແມ່ນມັນນີ້ຊຸກຍູ້ລູກຫຼາຍຄົນ, ມັນອາຍຸໄດ້ 27-28ປີ ມັນເຮັດໄດ້ຕີຫັ້ນໜາ. ຈັ່ງຊັ້ນໜາ ເພິ່ນນີ້ ລຸງບຸນມີ ກໍ່ເລີຍໃຫ້ກິນເງິນອຸດໜູນ, 70 %ໜຶ່ງດອກ, ເດືອນໜຶ່ງແສນຊາວປາຍພັນ, ທັງເງິນປີ້ມເງິນອີ່ສັງວ່າໄດ້ທໍ່ໃດກໍ່ຢ່າ.

ດຽວນີ້ອອກລູກອອກເຕົ້າໃຜເອົາອອກມີແຕ່ມີເມຍເພິ່ນນີ້ອອກ, ລາວເອງໝົດນີ້ເປັນຜູ້ເອົາອອກ, ລາວນີ້ເປັນຜູ້ເບິ່ງແຍງ, ບໍ່ວ່າແຕ່ລູກໃຜໃນເຮືອນ, ລູກຜູ້ອື່ນລາວກໍ່ເອົາອອກຫຼາຍຄົນ, ບາດລາວເຈັບນີ້ດອກຈັ່ງວ່າລຸງບຸນມີເວນ, ລຸງບຸນມີສິ່ງນ້ຳໃຫ້ລາວບໍ່ໄດ້, ລຸງບຸນມີໃຫ້ນ້ອງລາວມາສິ່ງໃຫ້, ນ້ອງລາວກໍ່ແພດຄືກັນ. ດຽວນີ້ມັນອອກບຳນານແລ້ວເດຕຳຫຼວດ. ມື້ນັ້ນກໍ່ຢືມເອົາລົດເຂົາໄປເອົາລາວມາສິ່ງນ້ຳຄັນໝູ່ເຈັບຫັ້ນສະບາຍເອົາລາວມາສິ່ງນ້ຳ, ສິ່ງກໍ່ໄດ້ບາດລາວເອງເຈັບຫັ້ນຕິຍາກ,ອັນນັ້ນດອກໄລຍະຂອບເຂດຂອງຄອບຄົວເພິ່ນ. ລູກຊາຍເພິ່ນໝົດ 4 ຄົນ, ໄປທະຫານພັນທະກໍ່ສຳເລັດມາ 2 ຄົນ, ດຽວນີ້ກໍ່ເຮັດກຳມະກອນໂຮງເລື່ອຍນຳພີ່ອ້າຍເຂົາ. ລູກເພິ່ນຜູ້ທີ່ສອງຫັ້ນເປັນຕຳຫຼວດຮຽນຢູ່ດອນຕີ້ວ, ຊິປິດຮຽນແລ້ວມັນເມືອສອບເສັງ, ປະດັບຊັ້ນແລ້ວກໍ່ມາ, ແລະກໍ່ໜຶ່ງຫັ້ນເປັນກຳມະກອນຕັດໄມ້ທ່ອນນຳພີ່ອ້າຍເຂົາ, ນຳເອື້ອຍເຂົາ, ເພາະວ່າລູກລຸງບຸນມີ 4 ຄົນນີ້ແມ່ນວ່າບໍ່ຜິດກັນໃດ, ເອື້ອຍເຂົາອອກລູກນີ້ ເຂົາ 4 ຄົນປຸ້ມລຸມໄປໂລດ; ແຕ່ພີ່ອ້າຍເຂົາຍັງບໍ່ທັນປົກກະຕິ. ພີ່ອ້າຍເຂົາຍັງໄປຫາເງິນຫາຄຳ, ເຂົາໄປແບ່ງກັນເຮັດໜ້າທີ່ເບິ່ງອ້າຍເຂົາຢູ່ກາ. ແມ່ທ້າວລຳຫັ້ນໜາຕ່າງໃດ ໃຫ້ລາວຢູ່ຈຸບລາຄືກັນ ອີ່ນັ້ນ 55 ປີ, ເມຍເພິ່ນ 51 ປີ ມັນກໍ່ບໍ່ເຫັນເອີ້ນວ່າປ້າ ເອີ້ນວ່ານ້າສາວ, ມັນກໍ່ເອີ້ນວ່າແມ່ເຕັມສິບເຕັມປາກ. ມີເຂົ້າມີນ້ຳ, ມີອາຫານການກິນໝາກໄມ້ໝາກຕອກ ມັນກໍ່ມາສິ່ງໃຫ້ພໍ່ແມ່. ຫວ່າງໜຶ່ງນີ້ກໍ່ມາສິ່ງເຂົ້າສອບໜຶ່ງ, ລູກເພິ່ນຜູ້ຢູ່ຕຳຫຼວດຄືກັນມາຫັ້ນມັນກໍ່ເອົາເງິນມາໃຫ້. ຫວ່າງແມ່ເຈັບມັນກໍ່ເອົາເງິນມາໃຫ້ 100,000 ກີບ ເລື້ອຍໆດອກ, ຕ່າງໝູ່ໃດ, ເອື້ອຍນຽນວ່າ ລູກເຈົ້ານີ້ຕ່າງໝູ່, ຕ່າງແນວໃດຂອງເຂົາຮັກກັນໝົດ ລູກເມຍໃໝ່ ແລະ ລູກເມຍເກົ່າ.

ລຸງບຸນມີວ່າເພິ່ນເບິ່ງເດີຊິໄລ່ເມຍກົກນີ້ເປັນເຜົ່າລາວ, ເປັນຄົນບ້ານເອງ, ເມຍທີສອງເປັນ ເຜົ່າລາວ,ເປັນຄົນບ້ານທາງພູບ້ານສາລະວັນ, ເມຍທີສາມນີ້ ເຜົ່າຕະລຽງ ບ້ານດາກຈຶງນີ້. ຈັ່ງວ່າ ເມຍໃດກໍ່ບໍ່ຂັດກັບວຽກລຸງບຸນມີແລະກັບເມຍຂອງເພິ່ນ.ບໍ່ແມ່ນຊ່າງຍິວະຄືເພິ່ນເວົ້າ: ນາງວັນພາ ຢູ່ເມືອງອຸດົມ ຫວ່າງເພິ່ນເມືອແຕ່ສອງແຂວງຫັ້ນ, ຄັນແມ່ນໃຈເພິ່ນເອງບໍ່ຢາກມາຫາເມຍຫັ້ນໜາ, ເພິ່ນຢາກໜີໄປທາງອື່ນອີກໜຶ່ງກໍ່ຫຍຸ້ງຍາກກັບສັດຕູແດ່, ພໍ່ຈຳມັນ ກັບສາລະວັນອີກ ຊຽນໜັງສືເລັ່ງໃສ່ພໍ່ພຸ້ນ, ຄັນອ້າຍມາຮອດເຮືອນໃຫ້ອ້າຍຂຶ້ນມາຫາຂ້ອຍແດ່, ມັນກໍ່ສະຫຼາດໝໍ່ນັ້ນ ມັນກໍ່ເປັນໜັງສືຄືກັນ.

ຈັ່ງວ່າລຸງບຸນມີປະດັບຫຼຽນ 30 ປີ ຫັ້ນເດີ ຄືຈັ່ງວ່າເພິ່ນໃສ່ 16 ຄັ້ງໃຫຍ່ໆ ບໍ່ມີຫຍັງລະເພິ່ນກໍ່ບໍ່ເຄີຍຖືກເຈັບ, ຈົນບັກສາຍສະໝອນຜູ້ມາຢູ່ນຳເພິ່ນນີ້ຄັນມັນຊິເຂົ້າສູ້ຮົບມັນວ່າໂອ່ຍ ຂີ້ຄ້ານເຈັບເດ. ບ່ະເກັດລູກປືນຖືກມຶງວ່າມ່ວນບໍ, ມັນວ່າໂອຍ ບໍ່ຢາກເຈັບຄືອ້າຍຫັ້ນແລ້ວ, ມັນຫາກຕິເທື່ອໃດມັນຫາກມີໂລດບໍ່ໜ້ອຍກໍ່ຫຼາຍອັນຄວາມເຈັບຫັ້ນ; ລຸງບຸນມີວ່າຜີບ້າຊິຖືກກູຫັ້ນ. ແລະເຂົາມາຖາມຂອງດີນຳລຸງບຸນມີຫັ້ນ, ເພິ່ນລະວ່າຂອງດີ ຢູ່ໃສຂອງດີຢູ່ນຳຫົວກູນີ້ລະ. ເພິ່ນເປັນຄົນແນວນີ້ ແຕ່ກີ້ລຸງບຸນມີ ເພິ່ນມີຂອງດີຫັ້ນ[34], ບາດເພິ່ນຊິຂຶ້ນເມືອຢູ່ຫວຽດນາມຫັ້ນໜາປະໝົດ, ເພິ່ນເອົາສິ່ງຄືນ, ມັນຍາກການຢູ່ການກິນ, ຢາກຂ້າມຮົ້ວບໍ່ໄດ້ບໍ່ແມ່ນຄືເຮົານ່າເຂົາຫັ້ນ, ປະສິ່ງເພິ່ນໝົດ.

ອັນກັນດານແມ່ນຕົນເພິ່ນບັນຊາຄືຢູ່ບ້ານເໜືອຍນີ້, ຝຣັ່ງສາມກອງຮ້ອຍ, ເພິ່ນກອງຮ້ອຍດຽວໄປຕີ, ອັນນີ້ກໍ່ໂຕນນ້ຳຫວ້ຍ, ຄົນບ້ານເພິ່ນນີ້ຕາຍຜູ້ໜຶ່ງ, ໂຕນນ້ຳຫວ້ຍຂະນວນ, ຕີວົງປິດຂອງສັດຕູລ້ອມອອກຂອງຢູ່ບໍ່ໄດ້ເດ. ອັນນັ້ນອັນທີໜຶ່ງບ່ອນມັນປິດລ້ອມ. ບາດນີ້ອັນທີສອງບ່ອນມັນກັນດານນີ້ ເພິ່ນຕີໜອງຢານີ້ ປະມານ 4 ໂມງແລງຈົນຮອດ 8 ໂມງກາງຄືນ. ອັນນີ້ກໍ່ບໍ່ແມ່ນລຸງບຸນມີເອງບັນຊາ,ເພິ່ນເອງຍັງເປັນນັກຮົບຢູ່ ຕີກັນຄາວນັ້ນ, ທາງມັນມີອັນ

---

[34] ຂອງດີໝາຍຄວາມວ່າຂອງຮັກສາຕົວ, ປືນຍິງບໍ່ແຕກ, ຍິງແຕກແຕ່ບໍ່ຖືກ, ຫຼືມີດແທງບໍ່ເຂົ້າ, ເລົ່ານີ້ຄືຄົນລາວເຄີຍເຊື່ອຖືກັນມາແຕ່ບູຮານ.

ນັ້ນເດ, ມີໝາກເຈນ້ອຍເດ, ທາງເຮົາບໍ່ມີ, ແຕ່ເພິ່ນເອົາເບິ່ງວ່າມຶງປ່ອນຫົວອອກມາ, ປືນຝ່າຍເຮົາກໍ່ບໍ່ຫຼາຍຄາວນັ້ນ. ຄັນເຈົ້າຍິງທົ່ວທີບເຈົ້າໝົດລູກປືນເຈົ້າເດ. ອີກໜຶ່ງກໍ່ຖືກສຳຫຼວດ, ສອງມາບາດສັດຕູມາບຸກເຈົ້າຊິເອົາພິສັງຍິງ, ໃຜກໍ່ແນໃສ່ຄັກໆໃຜກໍ່ແລ່ນເຂົ້າຄັນນາ, ຂອງຕີກັນຢູ່ກາງນາຈຶ່ງໃສ່ກັນ. ມັນຕາຍຫຼາຍ, ໄທເຮົາຕາຍກອງຫຼອນຜູ້ໜຶ່ງ, ກອງຫຼອນຍ້ອນວ່າມ່ວນຫັ້ນ, ຂອງວ່າຄໍ່າມາແລ້ວກໍ່ນອນ ເອົາປືນສາກໄວ້ໄປກ່າຍໄວ້ຢູ່ພຸ້ນ, ນອນເໜັບເອົາຕີນຕີບກັນ. ຕີດີເອົາແຕ່ມັນໃສ່ກາງຫຼັງນີ້ຂາດ ເຂົາວ່າປະໝາດ, ສະນັ້ນໃຜປະໝາດກັບເສີກນີ້ເຈັບແສບສຸດ. ສະນັ້ນ ລຸງບຸນມີບໍ່ດ່າຈັກເທື່ອ. ເບິ່ງພວກເຮົາຕີຢູ່ບ້ານໂພນນີ້, ຕີຢູ່ຫົວທາງເຂົ້າເຮືອນນີ້ອ້າຍເສີກເດເປັນກອງຮ້ອຍ, ມັນວ່າມື້ອື່ນຈັ່ງເບິ່ງຫັ້ນ, ມຶງຊິອາໂລມຶງຕາຍ ພວກທະຫານສັດຕູ. ເພິ່ນວ່ານີ້ເດີບັກຫືດເດີ, ອາລັກຂ້າເດີ ມື້ນັ້ນມຶງປົບມັນແຈ້ງມາກ່ອນ. ມັນກໍ່ປົບອີ່ຫຼີເຫັນແຫລະຄາວນັ້ນ, ບັກຕຶ່ງເດຮ້ອຍເອກຄາວນັ້ນ.

ຢູ່ສະໜາມຣົບຕ້ານການປັດກວາດຢູ່ດອນໝາກນັດ ຕອນນັ້ນເປັນສົງຈຶ່ງວ່າດຸເດືອດ ຂອງຈຳນວນສັດຕູ ໜ້ອຍກວ່າຝ່າຍເຮົາ, ແຕ່ວ່າຝ່າຍເຮົາຈຳນວນຫຼາຍກວ່າ, ເອົາປືນໂຕເອງຍິງໃສ່ໂຕເອງ ຍິງໂຄ້ງໃສ່ໂຕເອງ, ຕີກໃສ່ກອງຮ້ອຍສາມ, ທາງລຸງບຸນມີນີ້ ຈິນບອກໃຫ້ບັກຕິດຕາມແລ່ນໄປບອກໃຫ້ເຖົ້າສີມບູນຫັ້ນຍ້າຍອອກແດ່, ຄັນຍ້າຍອອກຫຼາຍພັດຖືກໝໍຄຳຈັນກອງຮ້ອຍສອງ, ກອງຮ້ອຍສາມພັດຢູ່ແຄມທົ່ງນາ; ຕ່ອຍກັນຢູ່ຫັ້ນຈິນຮອດ 7ໂມງ ຈຶ່ງໄດ້ເລີກກັນ,ຈຶ່ງວ່າ 7-8ໂມງ ຈຶ່ງໄດ້ກວາດສະໜາມ. ອັນນັ້ນຫັ້ນກໍ່ບໍ່ປານໃດດອກຄືຈອມກຸບຫັ້ນແຫລະ; ຈອມກຸບລຸງບຸນມີກໍ່ເວົ້າແລ້ວຍາກກວ່າໝູ່ກໍ່ແມ່ນໂຕຫັ້ນແຫລະ. ຈັ່ງວ່າເພິ່ນເອງຍິງໃຫ້ມັນຕາຍ, ບິນຂຶ້ນໄປຍິງໝົດ, ຈັ່ງວ່າຕັດສິນໃຈຄັກໆອ້າຍນ້ອງຄັນແມ່ນເຫັນລຸງບຸນມີຫັ້ນອຸ່ນໃຈໂລດ, ມັນອຸ່ນບໍ່ແມ່ນມັນຢ້ານຝ່າຍເຮົາດອກບຸກຂຶ້ນໄປ ລາກປືນເດກາອອກມາແດກໃສ່ໂລດ. ບັກຫງມວ່າມຶງແດກເດກາໃສ່ໂລດ, ເຫັນບໍ່ປ້ອມໂຕນັ້ນເພິ່ນເຮັດຕວດໆມາຫັ້ນ ຢູ່ຫາດຊາຍຄູນ, ຢູ່ດອນໝາກນັດ, ຢູ່ຈອມກຸບ. ຫວ່າງລາຍງານໃຫ້ກັບບັ້ນລົບ, ໃຫ້ທາງ

ກະຊວງກັບມາລົງແຂວງ, ແລະແວ່ລາຍງານໃຫ້ເພິ່ນຫວ່າງເພິ່ນເອົາປະຫວັດສາດ ການລົງມາເກັບກຳຫວ່າງໜຶ່ງມີ 160 ໜ້າ. ລຸງບຸນມີເອງເອົາມາຄົ້ນຄວ້າ ແລະ ປະກອບຄຳເຫັນໃຫ້ເພິ່ນ, ປະກອບກໍ່ບໍ່ຍາກແຫລ້ວ ແລະ ກໍ່ຫຼິງໜ້າຫຼິງຫຼັງ.

ກອງພັນທີສອງອັນຈາກທົ່ງໄຫຫີນນີ້, ຂອງລຸງບຸນມີບໍ່ໄດ້ຢູ່ໃນກອງພັນທີສອງຫັ້ນ. ຂ່າວມັນຈັ່ງຊີ້ເດີ, ກອງພັນທີສອງ ລຸງບຸນມີສູ້ແດ່ເລັກໜ້ອຍ, ມັນມີຄົນບ້ານໝື່ນບັກນີ້ຊື່ບົວລາ, ມັນມາຫວ່າງຫັນທິດນີ້ແຫລະ. ມາມັນເລົ່າສູ່ຟັງກອງພັນທີສອງ, ສ່ວນໜັກແໜ້ນຂອງມັນນີ້ມີຈິດໃຈເພິ່ງພາອາໃສນີ້, ມີກອງປັດໃຈ ມີພັນໂທ ຕູ້ ວິລະຊິນນີ້ແຫລະ. ແລະກໍ່ໃນນັ້ນມີອ້າຍຈຳນຽນເດ ແລະທອງສະຫວັດ ໄຂຄຳພິທູນເດກໍ່ຍັງຢູ່ຫັ້ນເດ, ຫຼາຍຄົນດອກເພິ່ນວ່າ ຄົນບໍ່ມີເຖົ້າຕູ້ນີ້ ບໍ່ຈັກທາງໄປ, ບໍ່ຮູ້ຈັກທາງຕັດອອກທົ່ງໄຫຫີນໄປໃສ່ໜອງແຮດ. ລຸງບຸນມີວ່າມັນບໍ່ແມ່ນໄປນຳທາງຂອງຕັດໃສ່ພູໄກ່ຂັນນີ້,ທຳມະດາໄປຕາມທິດຂອງທ້າວຕູ້[35], ອັນນັ້ນກໍ່ບໍ່ລະອຽດປານໃດແນວຄົນຂີ້ດື້, ຢູ່ໃນຫັ້ນໝໍປະຫວັດ ຄືຄົນຝຣັ່ງຫັ້ນໜາ ຈັກມັນຍັງຈັກມັນຕາຍ ດຽວນີ້ຜູ້ຮ່ວມກັບກິນມັງອໍ ກິນມັງອໍປາກພາສາຝຣັ່ງອັງກິດທໍ່ນັ້ນແຫລະ, ບໍ່ຖືກມັນກໍ່ຮ່ຳໄປໂລດ. ຈັ່ງວ່າລຸງບຸນມີຫັ້ນຮູ້ແຕ່ພໍຜ່ານໆຊື່ໆ, ລະອຽດເພິ່ນບໍ່ຮູ້, ລອດຈາກກອງພັນທີສອງນີ້ສ່ຳເກີດໃໝ່ເຂົາວ່າ. ຕາມໝໍອື່ນນີ້ມັນເວົ້າ ນ້ອງມາຫາອ້າຍເທື່ອນີ້ກໍ່ບໍ່ມີຫຍັງ, ມີແຕ່ປືນກະບອກໜຶ່ງເອົາລົງມາໃຫ້ເພື່ອຢ້ານວ່າທາງນີ້ບໍ່ມີຜູ້ຊ່ວຍ ແລະມາຊ່ວຍທະຫານເມືອງ ປີ1975 ນີ້ແຫລະໆໝໍນີ້ຫັ້ນ. ສຸດທ້າຍຄືຊິແມ່ນຂັດຂ້ອງ ຂັດຕຳແໜ່ງຍົດສັກບໍເລີຍອອກເລີຍ. ຈັ່ງວ່າເພິ່ນຫັ້ນກໍ່ບໍ່ໄດ້ຮູ້ກໍ່ມັນນີ້. ລຸງບຸນມີຊິເວົ້າຂໍມາຢູ່ກອງທະຫານຊັບຊ້ອນຂອງກອງພັນນີ້ແຫລະ, ກອງພັນທີໜຶ່ງມີອ້າຍປະດິດ, ອ້າຍພະລາງໄປສູ່ກອງພັນທີໜຶ່ງຢູ່ຊຽງເງິນເນາະ, ກອງພັນທີສອງຢູ່ຊຽງຂວາງ,

---

35 ທ້າວຕູ້ ແມ່ນ ທ່ານຕູ້ ເຜົ່າມົ້ງຢູ່ໜອງແຮດ - ຊຽງຂວາງ, ແຕ່ກີ້ເພິ່ບັນຊາກອງປັດໃຈເປັນກອງທະຫານເອກກະລາດຂອງເຜົ່າມົ້ງ ປະຕິບັດຢູ່ຊຽງຂວາງ, ຕໍ່ມາເພິ່ນເປັນຄະນະກອງບັນຊາກອງພັນທີສອງ ອອກຈາກທົ່ງໄຫຫີນ (ເພິ່ນເປັນວິລະຊົນ).

ຂໍນຳເພິ່ນ, ເພິ່ນກໍ່ບໍ່ໃຫ້ພະນັກງານນີ້ພໍແລ້ວ. ລຸງບຸນມີຈິ່ງເວົ້າວ່າ, ຍ້ອນວ່າເປັນນັກຮົບ, ພົມທັ້ນຢູ່ນຳອ້າຍນີ້ແຫລະລຸງໄກສອນຈັກເພິ່ນຊິໄປໃສ. ຂ້ອຍຄິດວ່າບາດນີ້ເພິ່ນສິ່ງໄປຮຽນຢູ່ຫວຽດນາມ, ຊຸມສຸດໃຈບຸນຍັງນີ້ ມີແຕ່ເພິ່ນສິ່ງໄປຮຽນຢູ່ຫວຽດນາມ. ບາດທັນທີດເພິ່ນຈຶ່ງເອົາຊຸມນີ້ມາເປັນນາຍທະຫານ, ໂຕນີຄືຊິແມ່ນເພິ່ນຢາກສິ່ງໄປທັ້ນ, ຫາກເພິ່ນບໍ່ເວົ້າໃຫ້ຟັງ, ຈຶ່ງວ່ານ້ອງມາເອົາເລີຍໄປສາເມືອນຳນ້ອງຊ້ຳ, ຈຶ່ງວ່າລຸງບຸນມີມັນໂຊກບໍ່ດີກັບການຮຽນ.

ໃບຍ້ອງຍໍຂອງລຸງມີນີ້ມັນບໍ່ມີຫຍັງແຫລະ,ເພິ່ນມີແຕ່ໃບຮັບປະກັນຫຼຽນໄຊ 30 ປີ, ເພິ່ນໄດ້ຫຼຽນໄຊຊະນະເລີດຊັ້ນໜຶ່ງ, ໄດ້ຫຼຽນໄຊອິດສະຫຼະຊັ້ນສາມໜຶ່ງໜ່ວຍ, ຍ້ອນວ່າເປັນຫຍັງເພິ່ນຈຶ່ງໄປຖືກຕົກຕ່ຳແທ້? ສ່ຽວລຸງບຸນມີຢູ່ວຽງຈັນມາຢູ່ສະຖາບັນຫຼຽນໄຊລົງມາຮ້າຍລຸງບຸນມີວ່າໃຜປະດັບໃຫ້ມຶງ. ລຸງບຸນມີວ່າ: ເວົ້າຄືຜີບ້ານກູຊິໄປລັກເອົາເອງຫວະ?, ເຫັນເພິ່ນຮັບຫຼຽນໄຊຊັ້ນສາມທັ້ນຍ້ອນວ່າເພິ່ນໄປຮັບຢູ່ພຸ້ນ, ຢູ່ວຽງຈັນພຸ້ນແມ່ນບໍ່ມີພື້ນຖານໄປຢັ້ງຢືນ, ມີແຕ່ໝູ່ເພິ່ນຂັ້ນເທິງໝູ່ເພິ່ນກໍ່ບໍ່ຊ່າງຊິວ່າ. ຫຼຽນພິລະອາດຫານຊັ້ນໜຶ່ງ, ແລ້ວໄດ້ຫຼຽນໄຊຊັ້ນສາມຫວ່າງເພິ່ນມາຢູ່ສາລະວັນ ເພິ່ນເວົ້າການລົບລ້າງບໍ່ຮູ້ໜັງສືທັ້ນລຸງບຸນມີລາຍງານໃຫ້ເພິ່ນຟັງ, ລຸງບຸນມີໄດ້ສອນໜັງສືໃຫ້ວັນນາຫຼອກ ວັນນາລີອີ່ສັງ, ເພິ່ນເລີຍຖືກຫຼຽນໄຊອິດສະຫຼະຊັ້ນສາມໜ່ວຍໜຶ່ງ, ໄປຜະລິດຢູ່ດົງບອງໜ່ວຍໜຶ່ງຫຼຽນກາແຮງງານໜ່ວຍໜຶ່ງ, ຫຼຽນຕ້ານຝຣັ່ງໜ່ວຍໜຶ່ງ, ຫຼຽນຕ້ານອາເມລິກາໜ່ວຍໜຶ່ງ, ເພິ່ນວ່າສາຍເພິ່ນແມ່ນສາຍພິລາດອາດຫານ, ລຸງບຸນມີທັ້ນບໍ່ໄດ້, ຂອງວຽກງານປະດັບທັ້ນໜ່ວຍໜຶ່ງ, ປົດປ່ອຍດານັງທັ້ນ. ປົດປ່ອຍດານັງລຸງບຸນມີຖືກໄປເປັນຫົວໜ້າຫ້ອງການ ຕ່າງປະເທດແລະເພິ່ນໄປປະ ຊຸມຢູ່ດານັງເດ, ຫວ່າງເພິ່ນຢູ່ສະຫຼອງນີ້ໄປປະຊຸມເຂົາເລີຍປະດັບໃຫ້, ລະເບີຍກໍ່ມີດອກ, ແມ່ນຫຼຽນບໍ່ແມ່ນຫຼຽນໄຊດອກ, ຫຼຽນກາປົດປ່ອຍ, ໃບຍ້ອງຍໍດຽວນີ້ເພິ່ນບໍ່ເຫັນແລ້ວ ມີແຕ່ໃບຮັບປະກັນຫຼຽນໄຊຍັງ.

ບາງກອງຮ້ອຍມັນສັບເຂົ້າກອງຮ້ອຍໄຊຈັກກະພັດ, ຫຼຸນກອງຮ້ອຍຈັ່ງວ່າລຸງສີທົນລົງຊື້ນຳໂດຍກົງ ກອງໄຊຈັກກະພັດຫວຽດທົງລາວ[36], ເຂົາເອີ້ນໄຊຈັກກະພັດ. ຫຼັງຈາກວັນທີ 20 ເດືອນມັງກອນ,ຫຼັງຈາກຈັກກະພັດລົ້ມແລ້ວພໍດີແຕ່ກ່ອນເພິ່ນເອງກໍ່ບໍ່ຮູ້ຈັກດອກ, ມາເຮັດນີ້ແລ້ວ ເພິ່ນຈຶ່ງຮູ້ຈັກກອງຮ້ອຍໄຊຈັກກະພັດ,ມີສາມສີ່ກອງຮ້ອຍເດີ: ກອງຮ້ອຍໜຶ່ງຢູ່ຈັນທະອຸດົມ, ກອງຮ້ອຍໜຶ່ງຢູ່ອຸດົມສິນ, ກອງຮ້ອຍໜຶ່ງຢູ່ເລົ່າງາມ. ມັນຫຼາຍກອງຮ້ອຍ, ກອງຮ້ອຍໜຶ່ງມີໝູ່ໜຶ່ງ 12 ຄົນ, ໝວດໜຶ່ງມີເກືອບ 20 ຄົນ. ນາຍໝວດ 3 ຄົນ, ມັນເຕັມ 12 ຄົນໝົດເລີຍ, ແບບທະຫານຝຣັ່ງ. ອັນຮຽນຫັ້ນແບບຝຣັ່ງກໍ່ມີ, ແບບໄທກໍ່ມີ, ຄຳນັບພຽງນາຍກໍ່ຢ່າດອກ, ລຸກຂຶ້ນປັບຄັບກໍ່ມີ,ຢູ່ກໍ່ມີ, ກໍ່ໂຕ່ຍກໍ່ມີ ຕ້ອງລຸກຂານໃດ່ ນັ່ງຖືກໂທດ, ຊິເວົ້າພາສາໃດກໍ່ໄດ້, ແນວໃດກໍ່ມີ, ຕັ້ງຄ້າຍຢູ່ເມືອງເງິນ ຫຼັງຈາກຝຣັ່ງມັນປະປົດຄ້າຍໝົດແລ້ວຫັ້ນ. ຕອນເພິ່ນໄປກອງໄຊ ຈັກກະພັດປີ 1949 ແລະ ເພິ່ນຈື່ໄດ້ວ່າກອງໄຊຈັກກະພັດຄືເລົ່າມານັ້ນ. ລຸງບຸນມີຮູ້ແລ້ວ, ແຕ່ວ່າການຕ້ານຄືນຂອງໄຊຈັກກະພັດນີ້ຖືກແລ້ວ, ລຸງບຸນມີອ່ານເບິ່ງກໍ່ຖືກມັນຢູ່ນຳກອງໄຊຈັກກະພັດ, ຫົວໜ້າແມ່ນພົມວິໄຊນີ້ ຄາວນັ້ນເພິ່ນຢາກໄດ້ເມຍເພິ່ນຢູ່ດອກ ດອນໄຊນີ້ພວກລຸງບຸນມີປ້ອງກັນແລະຊິຕາຍແລະຍາກຍ້ານຝຣັ່ງປິດລ້ອມ, ທ່ານບຸນມີ ພົມມີໄຊ ໃຊ້ໝວກປີເລຄືຂອງຝຣັ່ງໃຊ້, ແຕ່ບໍ່ແມ່ນສີແດງ, ຍອຍອີກ, ຍາວປັດຫຼັງອີກ, ໂກ່ເກົ່າແຫລະ, ບໍ່ແມ່ນງ່າຍ. ທ່ານບຸນມີພົມມີໄຊ ຢາກໄດ້ເມຍ ສາວຄຳໂອຍ! ເມຍທ່ານບຸນມີ ພົມມີໄຊ ເອົາລູກນາຍກອງທາງເໜືອ ກໍ່ສາວຄຳຄືກັນ ໝົດຄົນດອນໄຊລຸງບຸນມີວ່າຊິວ່າເມຍເພິ່ນທ່ານບຸນມີ ພົມມີໄຊ ນັ້ນແຫລະຜູ້ໜຶ່ງ, ອັນງານຫັ້ນເພິ່ນເບັດໃສ່ແລະຂວ້າມໄປດອນເນາະ ມັນປ້ອງກັນຍາກຊິຕາຍ ອັນພີ່ອ້າຍເພິ່ນອ້າຍອ່ອນເພິ່ນບໍ່ວິນ ມີແຕ່ເສິກ, ມີເຂົ້າຫາບ່ອນໃກ້ໆ, ບ່ອນຊິໄດ້ຕີເສິກ, ອີ່ຕານັ້ນຫັ້ນໄປໝູ່ວ່າຂຶ້ນ

---

36 ກອງທະຫານໄຊຈັກກະພັດແມ່ນກອງທະຫານປະສົມລາວ-ຫວຽດນາມ ໂດຍແມ່ນລຸງ ສຸພານຸວົງ ເປັນຜູ້ຈັດຕັ້ງຂຶ້ນ ໃນປີ 1948 ຢູ່ແຂວງ ຈຳປາສັກ. ໃນ 4 ກອງຮ້ອຍ: ຈັນທະອຸດົມ, ອຸດົມສິນ, ເລົ່າງາມ.

ໄປສອງແຂວງ,ລາວວ່າບໍ່ໄປ, ລາວວ່າຄັນໝົດເສິກລາວຊິຕາຍ. ລຸງບຸນມີວ່າອີ່ຕາອັນນີ້ ຄືຊິມີເຄື່ອງຢ່າງໃດຢ່າງໜຶ່ງ, ສຸດທ້າຍລາວກໍ່ຕາຍອີ່ຫຼີ, ຢຸດຍິງກັບຝຣັ່ງລາວກໍ່ຕາຍ. ຄັນເວົ້າແລ້ວມີແຕ່ງ້າວໃສ່ໂລດ. ໝໍ່ນັ້ນຊິຂ້າລຸງບຸນມີເທື່ອໜຶ່ງຢູ່ຕະໂອຍນີ້, ລາວວ່າຕິດຕໍ່ມັນຂາດກັນຕິ, ລຸງບຸນມີ ພວກບໍ່ແມ່ນຊິມີເກີບມີຫຍັງເຂົາລະມີໄປສາຍ. ບາດໄປຮອດລາວວ່າບັກໃດມາໃກ້ກູຊິຕັດຄໍ, ກູຕິດຕໍ່ໄປຫວ່າງໜຶ່ງ ບໍ່ໄດ້ຍິນເບາະ, ລຸງບຸນມີວ່າບໍ່ໄດ້ຍິນແຫລະແນວເກັບປວກອອກລາວວ່າ: ຊິຕັດຄໍເບິ່ງ,ຕັດແມ່ ລຸງບຸນມີວ່າ, ລຸງບຸນມີ ກໍ່ມີປືນກັງເດ, ອ້າຍບໍ່ຢ້ານຕາຍບໍ, ຂູ່ຄືນໃດບາດນີ້, ມັນຈິນຕາແຈ. ຄົນຂີ້ດື້ຄືລຸງບຸນມີຫັ້ນ. ໝູ່ສ່ວນຫຼາຍບໍ່ໄດ້ຖືປືນຖືສັງດອກ, ປືນຕາກຕອກຕາມຕິງ,ລຸງບຸນມີໄດ້ຖືປືນດີໆໂລດປືນກັງເດ, ຖືວ່າທີໜຶ່ງແລ້ວລູກ 30 ນັດ.

ຢູ່ກອງໄຊ ຈັກກະພັດເບື້ອງນັ້ນ, ສ່ວນຫຼາຍຊິນເຜົ່າສຸຂຸມມາ ຊິນເຜົ່າສ່ວຍ, ສ່ວນຄົນພິມມະຈັກ, ນາຍພົນສີນວນ, ນາຍພົນກີ ມີແຕ່ເຜົ່າສຸຂຸມມາໝົດແຫລະ. ແຕ່ວ່າມາຮອດດຽວນີ້ມັນເປັນລາວໝົດ ມີຫັ້ນ. ບາດກອງລຸງບຸນມີ ມາຢູ່ພີ້ ມີເຜົ່າແງະ, ມີທັງຕະລຽງ, ມີທຸກຊິນເຜົ່າ. ຄາວຕີຝຣັ່ງກໍ່ຄືວ່າຫັ້ນແຫລະ,ມີແຕ່ລະເບີດເບາະ, ຝັງລະເບີດໃສ່, ຝັງມິນໃສ່, ມະເຄາະມະແຄະ ຍິງມັນແຫລະຢູ່ຂີວລຳພັນນີ້ ຝຣັ່ງບັກໜຶ່ງ ຈັບລຸງບຸນມີເຮັດທາງເລກ 13, ຜູ້ໜຶ່ງມັນຖືກເຈັບ ຖືກທິວເຂົ່າມັນ, ອ້າຍປະດິດວ່າ: ຫາມໆ, ພັດຖືກໝູ່ລຸງບຸນມີຫາມ. ລຸງບຸນມີວ່າໄປໆໝູ່ເຈົ້າໄປ! ລຸງບຸນມີຊິຫາມໄປຫັ້ນ, ປະລິງປືນລຸງບຸນມີງັບຍິງ, ເພິ່ນບໍ່ວິນ ເຢັດແມ່ມັນອີ່ສັງກັບຝຣັ່ງ. ຍ້ອນອັນນັ້ນແຫລະລຸງໄກສອນ ຈຳແນກລຸງບຸນມີວ່າປົວແປງພັກ, ເພິ່ນວ່າ: ເຈົ້ານີ້ປະຕິການ, ມີແຕ່ຂ້າລູກດຽວ! ຮວ້າຍຫາມມັນໜັກຕິ! ຫາມແຕ່ທາງເລກ 13 ຮອດບ້ານຕີນທົ່ງໄຊລຸງບຸນມີເລີຍບໍ່ວິນມັນໃຫ້ມັນຕາຍເອງ, ມັນຢາກຮ້າຍຂ້າໂລດ, ບາດມັນຂ້າເມຍນ້ອງຫັ້ນເດ ຖຽງລາວຫັ້ນ.

ໄລຍະພໍ່ເພິ່ນ ເປັນກອງຫຼອນ ພໍ່ເພິ່ນ ຂ້າຝຣັ່ງສອງຄົນ, ຜູ້ໜຶ່ງ ຢູ່ທິວຂີວຫ້ວຍລຳພັນນີ້, ຄາວນັ້ນ, ເປັນທະຫານຫາມກັນແຕ່ພີ້ເດ, ໄປອອກບ້ານ

ໂພນ, ຫວຽດຖືກມົກ ໃສ່ໝົດ, ພວກເຂົາລັດທາງນັ້ນ. ແຕ່ກໍ້ສິ່ງຂ່າວມີຖືນີ້ ເພິ່ນຢ້ານບໍ່ໄວທີ່ປະຊາຊົນສິ່ງຂ່າວ. ໂອຍ ປັບໆ ທ່າແຕງ, ຄັນມັນກຽມອອກ ປັດກວາດ, ອັດຕະປືກໍ່ຄືກັນ ຄັນມັນກຽມອອກປັດກວາດປະຊາຊົນສິ່ງຂ່າວແຕ່ ບ້ານນີ້ໄປບ້ານນັ້ນແລ່ນໂລດໄວເຂົາສິ່ງຂ່າວ. ເຂົາເອົາໃຈໃສ່ແທ້ໆແລ່ນໂລດ, ເບິ່ງແນ່ຕິ ຕີກັບອາເມລິກາຢູ່ບ້ານຈຸລານີ້, ເຂົາຫຼົ້ນບຸນປີໃໝ່, ທະຫານສັດຕູ ເຕັມບ້ານ, ພວກລຸງບຸນມີກໍ່ຢູ່ປ່າກາເຟຫັ້ນ, ເຂົາໄລ່ທິດນ້ຳກັນ, ເຂົາເອົາເຫຼົ້າ ໄປໃຫ້ໝໍກິນ. ໝໍກໍ່ກິນຢູ່ຫັ້ນ. ເຂົາໄປທາງຫັ້ນເຂົາວ່າຢ່າໄປມີຫວ້ານໂຄ້ງ, ພວກຂີ້ຢ້ານບໍ່ຫານເຂົ້າໄປປ່າແຫລະ ຢ້ານຫວ້ານໂຄ້ງ. ອັນນັ້ນເລື່ອງພື້ນຖານ ຄວາມຮັກຄວາມແພງຂອງປະຊາຊົນ ເບິ່ງເກືອບຂອງພວກບ້ານລະວີເກືອພວກ ເຂົາໄວ້ໃຫ້ລຸງບຸນມີກິນ ແລະ ບ້ານອື່ນ ຄືກັນເຂົາໃຫ້ພວກໝູ່ລຸງບຸນມີ ກິນຫັ້ນ ແຫລະ. ເຂົາເຈົ້າເວົ້າວ່າເກືອຖຽງໄຮ່ພວກລູກໄດ້ໄປເບິ່ງບໍ? ເຫັນຢູ່ຫາກບໍ່ເອົາ, ປານນັ້ນໃດຄວາມສັດຊື່ຂອງພວກລຸງບຸນມີ ເຂົາຈັ່ງເຊື່ອພວກລຸງບຸນມີນີ້ ເຈັບ ໄຂ້ໄດ້ພະຍາດ ເອື້ອຍນ້ອງແມ່ເຮືອນທະຫານໄປເບິ່ງໄປແຍງ ໄປບິບຄັນລຸງ ບຸນມີ. ສັດຕູບ້ານເກາະນີ້ໄລ່ລຸງບຸນມີ ແຄ່ງເພິ່ນໄຄ່ປານນີ້ເຂົາມາໂຜະມາຫຍັງ ໃຫ້ອ້າຍຈັນດີ, ຄັນບໍ່ຊັ້ນຢ້ານນາຍໃສ່ໂທດ, ສອງຢ້ານຕາຍ. ຖືກປືນເຮັດ ທີ່ວທິບທີ່ວແດນ ເຮັດກັບແມ່ຍິງແມ່ຍ່າຜູ້ສາວຫັ້ນ, ຈຸດໜັກແລະຜູ້ອື່ນບໍ, ບັກ ເວີນນ້ຳເລີກຢູ່ກ້ອງຈຳປາສັກນີ້ແຫລະ, ສັດຕູໄລ່ມັນ ມັນກໍ່ໄລ່ຜູ້ສາວ, ປືນເສຍ ມັນກໍ່ໄປລັກເອົາປືນຢູ່ປິດເມືອງມິນ. ໝໍນັ້ນມັນດີ້, ປານນັ້ນປືນກາກຕິງມັນເສຍ, ອ້າຍບຸນຊີຂ້າມັນ ມັນໄປລັກເອົາປືນຢູ່ປິດນີ້ບັກເວີນນີ້. ໂອ່ຍ ດີ້ຂະໜາດເລື່ອງ ດີ້, ເທື່ອໜຶ່ງຜິດພາດເກີນຄວນ, ຄືຊິແມ່ນເຂົາໄປຍິງເປົ້າ. ມັນມາຢູ່ພາກນີ້ແລ້ວ ລຸງບຸນມີວ່າ: “ຮ້ວາຍ ເຮັດແນວໃດມື້ນີ້ແລ້ວ ບ້ານແຖວລຸງແກ້ວນີ້ແຫຼະ ບ່ອນ ໃດໄປຍາມທາງນີ້ມີຜູ້ສາວມາກ ມຶງມາມັນໄລ່ໂລດ. ດີ້ໃດຕິເສີກກໍ່ເກົ່າງ, ຢູ່ບຸນ ນິກເຈົ່າສັດຕູໄລ່. ມັນຖິ້ມປືນເຂົ້າຮູເໜັ້ນ, ອອກແຕ່ຫັ້ນໄປລັກເອົາປືນຊຸມນີ້ ໂອ່ຍດີ້ຫຼາຍ. ແຕ່ເພິ່ນນີ້ບໍ່ເຖິງຂະໜາດນັ້ນດອກ ໝູ່ເພິ່ນນີ້ດີ້ອີ່ຫຼືອີ່ຫຼໍ. ເພິ່ນຄັນຊິ ດີ້ໃສ່ກັບຜູ້ສາວນີ້ ຢ້ານປືນຖືກເພິ່ນຕາຍແລ້ວ, ຂອງບໍ່ໄດ້ຢູ່ໄດ້ເຊົາ. ຢຸດຍິງຄັ້ງ

ນີ້ກັບອາເມລິກາກໍ່ຢຸດຍິງນີ້ຂ້ອຍຈັ່ງເຊົາ, ອອກຈາກທະຫານນີ້, ອອກມາປົກຄອງຈັ່ງວ່າອອກຢູ່ວຽງຈັນປີ 1983 ດຽວນີ້". ລະເບີຍວ່າພວກເຮົາຕໍ່ພວກເຮົາກິນທະຫານນີ້ແຫລະ ກິນປົກຄອງກໍ່ກິນ ແຕ່ຄາວນັ້ນເງິນເດືອນ ລຸງບຸນມີຫັ້ນມາເບິ່ງຕາຕະລາງຂອງຫ້ອງບັນຊາການແຂວງ ເພິ່ນກິນຂັ້ນຮ້ອຍ ເອກ. ເພິ່ນຈຶ່ມມັນກິນຄືນແຫລະເຮັດແບວນີ້. ເພິ່ນເອົາອອກຈາກຫັ້ນອີກຍື່ນໄປທາງກະຊວງ, ກະຊວງຈຶ່ງສົ່ງມາອີກ ຈຶ່ງໃຫ້ເພິ່ນກິນຊັ້ນເພິ່ນຄືນ, ອ້າວຝາກໃຫ້ເພິ່ນທັງສົ້ງທັງເສື້ອ ທັງໝວກນີ້ແຫລະ.

ຕາມຈິດໃຈຂອງລຸງບຸນມີອອກໄປເອກກະລາດເບື້ອງຕົ້ນ ບໍ່ໝາຍຄວາມວ່າຊິໄດ້ເຫັນເອກກະລາດກະຫຼອກດອກ, ມີແຕ່ວ່າເພິ່ນຢາກຂ້າຝຣັ່ງ, ຄັນເພິ່ນໄດ້ຂ້າຝຣັ່ງ, ເພິ່ນດີໃຈອັນນັ້ນອັນໜຶ່ງ. ບາດເພິ່ນເຄື່ອນໄຫວໄປພົບຄົນທຸກຫັ້ນ, ບາດ 2 -3 ມື້ເພິ່ນບໍ່ໄດ້ກິນເຂົ້າກໍ່ມີ. ເປັນຕົ້ນແມ່ນເພິ່ນໄປຫາລຸງສີຫົນຢູ່ຊາຍແດນນີ້ ວັງເຕົ່າ ວັງໄຮ ທາງພູກອງນີ້ທຸກຍາກ, ຈຶ່ງວ່າເພິ່ນຄຶດວ່າເຊົາ, ຄັນເຊົາມັນກໍ່ວ່າໂງ່ຕື້ ວ່າ ອອກຈາກບ້ານເມືອຫາບ້ານເຂົາຊິວ່າບໍ່ຊື່ວບໍ. ບາດນີ້ລຸງບຸນມີກໍ່ເວົ້າ ພໍ່ເພິ່ນກໍ່ເວົ້າ ບາດໄປມຶງຕາຍກໍ່ແລ້ວ. ຂອງສຳເລັດໜ້າທີ່ຈັ່ງກັບມາ ລຸງບຸນມີຕອບ. ເພິ່ນບໍ່ໄດ້ຂີ່ລົດຮອດບ້ານບໍ່ເປັນຫຍັງດອກ, ເສຍດາຍແຕ່ຍ້ານເຈົ້າບໍ່ຍັງຫັ້ນ ຄວາມຈິງເວລາເພິ່ນກັບມາກໍ່ຂີ່ລົດຫາບ້ານໂພນງາມ, ລົດຈັກນີ້ແຫລະ, ບໍ່ແມ່ນລົດເກົ່າງດອກ ຈິນໄດ້ປະຕິບັດຕາມຈິດໃຈຂອງເພິ່ນເອງ. ອັນນັ້ນຈັ່ງວ່າລູກເມຍກໍ່ຫວັງໃຫ້ມັນສຳເລັດໜ້າທີ່ນີ້ແຫລະ ຄວາມຮູ້ສຶກຂອງເພິ່ນເຄີຍເປັນອາຈານເປັນນັກປາດ, ເຄີຍສອນວ່າເຮັດໃຫ້ມັນສຸດຊຸດໃຫ້ມັນເຖິງກໍ່ແປວ່າອອກເຮັດນາ, ເຮັດນາຈິນບໍ່ອຶດເຂົ້າ. ຄັນຢາກກິນນ້ຳຊຸດບາດໜຶ່ງສອງບາດມັນບໍ່ເຖິງດອກຊຸດຈິນມັນເຖິງໂລດ, ບາດທຸກມາບາດໃດກໍ່ຄຶດເຖິງຄວາມສັ່ງສອນ, ຈຶ່ງເຂົ້າໄປຕື່ມຄວາມສັ່ງສອນຂອງພັກນຳ. ຄືລຸງປະທານຜູ້ເສຍນີ້, ລຸງໄກສອນນີ້ ລຸງບຸນມີເຄີຍຢູ່ນຳເພິ່ນຕຳນິບໍ່ມີໃຜດອກຕຳນິ ມີແຕ່ລຸງບຸນມີນີ້ຕຳນິໄດ້. ລຸງບຸນມີວ່າ ເອົານຳບຸນມີ ຕຳນິໜາ. ລຸງບຸນມີຕອບ: ຄັນນ້ອງຕຳນິ ບໍ່ແມ່ນກໍ່ຢ່າ, ລຸງບຸນມີວ່າ: "ອ້າຍນີ້ຕາມໄດຍິນຂ່າວຄັນຊື້ມ້າບໍ່

ມັກມ້າກາ ບໍ່ມັກມ້າກອງຢ້ານມັນບໍ່ຮີໆ, ມາຮອດບ້ານຢ້ານຜູ້ສາວບໍ່ແນມເບິ່ງ ".ລາວຕິບມື ຕິບຫຼັງລຸງບຸນມີ. ມາຫວ່າງກ່ອນມາປະຊຸມຄັ້ງທີໜຶ່ງ ລຸງໄກສອນ ເອີ້ນລຸງບຸນມີແຫລະໄປຮັບຜິດຊອບ ການກິນການຢູ່, ຂອງເພິ່ນ ດີໆ ດີໃຈໃດ ເພິ່ນໃສ່ໄວ້ໃນປະຫວັດເພິ່ນໂລດ ຫໍ່ນັ້ນຈຶ່ງວ່າຂັ້ນເທິງ.

ລຸງບຸນມີວ່າ: "ເດີຊີຕອບສອງຢ່າງເປັນຈັ່ງໃດ, ເປັນສັງຈຶ່ງໄປນຳອິດ ສະຫຼະເພິ່ນເວົ້າແລ້ວຫວ່າງໜຶ່ງນີ້, ຍ້ອນຝຣັ່ງມາຖິ້ມບົມໃສ່ບ້ານເພິ່ນ ລູກເພິ່ນ ຕາຍ ເມຍເພິ່ນຕາຍ ຫາກໍ່ໄດ້ 4-5 ເດືອນ ໂຕນີ້ແຫລະເຈັບແຮງ, ຕ້ອງໄດ້ ໄປຂ້າຝຣັ່ງ, ບໍ່ໄດ້ກໍ່ບໍ່ຍອມ" (ມີຄວາມຄຽດແຄ້ນຂອງລຸງບຸນມີ). ລຸງບຸນມີອອກ ເປັນທະຫານອິດສະຫຼະບໍ່ໄດ້ເປັນທະຫານມັນ, ຂອງມີອິດສະຫຼະມາແລ້ວຄາວ ນັ້ນ. ປິດພະໂພກໍ່ຍັງຢູ່ຄາວນັ້ນ, ບ້ານເພິ່ນກັບປິດພະໂພຂ້ວາມກັນຢູ່ທີ່ງນາ ດຽວເທົ່ານັ້ນ. ເພິ່ນໄປບາດນີ້, ເຂົ້ານ້ຳຊ້ຳປາມີ, ໄປເຮັດຈັ່ງໃດຈຶ່ງໄປໄດ້ຄາວ ນັ້ນ ພໍ່ຂອງເພິ່ນເປັນແກ່ນສານ ກ່ອນແລ້ວ, ລາວໄດ້ພົວພັນກັບລຸງແກ້ວຫຼວງ ເສນາ ພົວພັນກັບອິດສະຫຼະກ່ອນແລ້ວ ກັບອ້າຍບຸນພົມມະຫາໄຊ ເປັນລູກຮັກ ຂອງພໍ່ລຸງບຸນມີແລ້ວ, ອ້າຍປະດິດກຽງຄຳນີ້ເປັນລູກຮັກຂອງພໍ່ລາວແລ້ວ ລຸງ ບຸນມີຈຶ່ງຖືເປັນອ້າຍມາຮອດທຸກມື້ນີ້ (ເພິ່ນຕາຍແລ້ວ) ເປັນອ້າຍລຸງບຸນມີເລີຍ. ອັນນັ້ນລຸງບຸນມີຈັ່ງໄປ, ຈັ່ງຊັ້ນລຸງໄກສອນ ຈຶ່ງຈຳແນກລຸງບຸນມີ: "ເຈົ້ານີ້ປະຕິ ການ ເວົ້າແລ້ວ ຂ້າໂລດ ຂ້າໂລດ, ຮ້ວາຍມັນອິດບໍ່ໄດ້ເດ ມັນຄວາມຄຽດ ຫັ້ນ". ລຸງບຸນມີທົນທານຍາວນານມາໄດ້ຍ້ອນຄຽດສັດຕູນີ້ແຫລະ, ເພິ່ນເຮັດຈັ່ງ ໃດຄັນຊີວິດຂອງເພິ່ນຍັງເຮັດໄດ້ໜ້ອຍໄດ້ຫຼາຍ ກໍ່ຍັງເຮັດເປັນເພື່ອນຮື້ນເພື່ອນ ຍຸງ. ບາດຄືວ່າຈັ່ງໃດຈັ່ງມາຢູ່ພີ້ ເພາະວ່າເຄື່ອນໄຫວຢູ່ພີ້ ແຕ່ປີ 1951 - 1953 ເພິ່ນຈັ່ງຂຶ້ນພຸ້ນ. ບາດເພິ່ນກັບມາທັນທີດຢູ່ນີ້ ບ້ານນີ້. ໄປທາງ ບ້ານນອກເຂົາກໍ່ຊັ່ງສູ່ມື້ໃດໃຫ້ເພິ່ນໄປລຸງໄປແມ່ ຄັນຢາກກິກໝາກໄມ້, ຢາກ ກິນໝາກກ້ວຍ ຢາກກິນອີ່ສັງ. ລຸງບຸນມີລອງໄປເບິ່ງກັບເມຍໄປຮອດບ້ານໂພນ ລິດກະບະເພິ່ນເອົາໄປຈີນເຂົາຮ້າຍບໍ່ມີບ່ອນໃສ່ ເຂົາເອົາໝາກກ້ວຍອີ່ສັງອີ່ສັງ ຫັ້ນແຫລະ ຈັ່ງວ່າລຸງບຸນມີເມືອບ້ານຕົນເອງ ນ້ອງນຸ່ງເພິ່ນຈຳນວນໜຶ່ງຫັ້ນເຂົາ

ກໍ່ມາຢູ່ພີ້ແຫລະ, ຍັງແຕ່ນ້ອງສາວໃຫຍ່ແປະເພິ່ນຢູ່ບ້ານຢູ່ເຮືອນ, ເພິ່ນໂລດບໍ່ຈັກຊິເມືອ, ບ້ານເພິ່ນພັດຫ່າງໄກທາງລົດ, ຫ່າງໄກໂຮງໝໍໂຮງຢາກິນ, ຫ່າງໄກຕະຫຼາດຕະລີ. ອັນນີ້ໄຄແດ່ ເພິ່ນໄປຊອກຊື້ກໍ່ສະດວກສະບາຍ. ແຕ່ວ່າຫຼາຍຢູ່ເຂົາຊວນເພິ່ນເມືອແຕ່ຫາກເພິ່ນບໍ່ເມືອ.

ນະໂຍບາຍຕອບໃຫ້ເພິ່ນອັນນີ້ບໍ່ແມ່ນປະໝາດ ເພິ່ນກໍ່ຕອບມາຫຼາຍຄົນແລ້ວ, ແຕ່ກ່ອນຈັດຕັ້ງເພິ່ນມາ ລຸງບຸນມີອັນເພິ່ນໃຫ້ລຸງບຸນມີໄດ້ກິນເງິນບໍານານມານີ້ເທົ່າໃດ, ສອງນີ້ເພິ່ນກໍ່ໃຫ້ລຸງບຸນມີຫຼຽນກາຫຼຽນໄຊນີ້ແຫລະ. ອັນນີ້ເລື່ອງລົດເພິ່ນກໍ່ບໍ່ສໍາລົດຖີບນີ້ແຫລະ ເພິ່ນກໍ່ບໍ່ຖາມຫາເລີຍ, ວິພອນນີ້ແຫລະກໍ່ບໍ່ທັນມີ, ເພິ່ນຢືມເງິນສ້ອມແປງເຮືອນຫວ່າງຫັ້ນຫ້າລ້ານກີບ ຂັ້ນເທິງກໍ່ຕັດເງິນເດືອນເພິ່ນ, ຕັດຈົນໝົດຫ້າລ້ານ, ຕັດອອກໝົດ. ອັນນີ້ຂໍນໍາບໍ່ແມ່ນຂັດຂ້ອງຂັ້ນເທິງດອກ. ຫວ່າງທ້າວສີມາໃໝມາເພິ່ນກໍ່ເລົ່າຕາມຄວາມຈິງຫັ້ນລະ ເພິ່ນບໍ່ມີອີ່ສັງຄືເຮືອນຊານນີ້ແຫລະ, ຫຼັງເຮືອນໂຕນີ້ກໍ່ແປວ່າແມ່ນຂອງເພິ່ນເອງ. ຄືລຸງບຸນມີເວົ້າຫັ້ນແລ້ວ ເຂົາຊິຕິດປ້າຍ, ທ. ລ, ໃສ່ ຂອງວ່າເພິ່ນໄປຖາມຫ້ອງການພຸ້ນ ຄັນວ່າເພິ່ນໃຫ້ຕິດ ທ.ລ, ກໍຕິດໃສ່. ບາດທາງຫ້ອງການວ່າບໍ່ແມ່ນດອກເຮືອນເຈົ້າເອງ ເຮືອນເພິ່ນເອງ ກໍ່ເຮືອນເພິ່ນເອງ. ອັນລູກເພິ່ນຊຸມ 4 ຄົນ ເຂົາໃຫ່ຍມາໃຫ້ເຂົາເຮັດໃຫ້ເຂົາສ້າງເອງ ພໍເຂົານັ່ງເຂົານອນໄປແບບຊີ້ດອກ. ໄຄແດ່ຈິດໃຈຫັ້ນຂໍຂັ້ນເທິງແລ້ວດຽວນີ້ເພິ່ນກໍ່ເຮັດຄໍາຮ້ອງ, ເຮັດເອກະສານໃຫ້ເຂົາ ຫວ່າງຫັ້ນ ເພິ່ນຂໍໂຄຕ້າລົດນໍາຂັ້ນເທິງກໍວ່າຊິໄດ້, ເຂົາວ່າລຸງບຸນມີຊິໄດ້,ແຕ່ເຂົາວ່າລຸງຊິຊື້ໄດ້ບໍ, ມີເງິນບໍ, ບໍ່ມີລຸງບຸນມີວ່າກໍ່ຂາຍ, ເພິ່ນເວົ້ານໍາພະນັກງານເຮັດວຽກນະໂຍບາຍວ່າ ຂ້ອຍບໍ່ມີເງິນ ຂ້ອຍຂາຍຊື້ລົດຈັກກໍ່ສຸດແລ້ວແຕ່ຂ້ອຍເອງ. ຊື້ລົດຖີບກໍ່ສຸດແລ້ວແຕ່ຕົນເອງຄະແນນມັນໄດ້, ເພິ່ນຢາກເຮັດເຮືອນເຮັດຊານກໍ່ສຸດແລ້ວແຕ່ຕົນເອງ, ເພິ່ນກິນຮອດມື້ຕາຍກໍ່ສຸດແລ້ວແຕ່ເພິ່ນເອງ, ລຸງບຸນມີເອົາໃຫ້ສະຫວັດດີການໂດຍກົງ. ທາງບຸນທໍາວ່າ "ໄດ້ຄັນລູກສາວເຈົ້າຊື້ ຂ້ອຍຊິອອກໃຫ້ໄດ້". ບາດລຸງບຸນມີມາຖາມຄືນອີກວ່າ ເອກະສານນີ້ບໍ່ຖືກ, ລຸງບຸນມີໄປເຊັນອີກຫວ່າງນີ້, ຈັກໜ່ອຍເພິ່ນຕາຍກໍ່ບໍ່ໄດ້ເງິນ

ປີງສິບປີງເມມຄືເຂົາເວົ້າ. ບໍ່ໃຫ້ຮ້ອນເດີໂຕນີ້ຫັ້ນ, ເພິ່ນບໍ່ຕີຢູ່ນີ້ເພິ່ນມີແລ້ວ, ເພິ່ນວ່າເວນເພິ່ນເອງໃຜບໍ່ຖິ້ມປະເພິ່ນຢູ່ນີ້ເຮືອນເພິ່ນເອງ, ດັ່ງນັ້ນແລ້ວເພິ່ນຈຶ່ງຕອບດ້ວຍຄວາມສັດຊື່. ມີຫຼານຊາຍເພິ່ນລູກເອື້ອຍເພິ່ນຜູ້ຕາຍຢູ່ໃນສະໜາມສູ້ຮົບ ກອງ ປ ຕ ອ ສາລະວັນນີ້ແຫລະ ເຂົາມາທາງເມືອງເພັງ ເຂົາມາທາງເມືອງປ້ອງພໍດີສັດຕູຕີຕາຍຄາທີ່ຊຸມປືນໃຫຍ່; ຈັ່ງລຸງບຸນມີ ແລ່ນເອກະສານເພິ່ນໄປເຊັນໝົດສະພາເຊັນໝົດຈັດຕັ້ງຢືນຢັນແລ້ວ, ຈັກຊິໄດ້ຫຼືບໍ່ໄດ້ ເພິ່ນວ່າຄັນໄດ້ກໍ່ເຮັດບຸນນຳມັນ. ຄັນຂັ້ນເທິງຍັງຮອດນາຍພັນແລ້ວ ກັບອີ່ລູກກົກເພິ່ນນີ້ເປັນຄູຫັ້ນ, ບັກນັ້ນວ່າຫັ້ນມັນໂທມາຫວ່າງເພິ່ນຢູ່ກອງບັນຊາການ, ບັກນີ້ພັດຢ້ານລຸງບຸນມີບໍ່ໃຫ້ໄປເປັນທະຫານ, ໄປລະໄປຮຽນຢູ່ທວງດນາມຈົບ ແລ້ວໄປຢູ່ກອງພັນທີ 6 ປ ຕ ອ.ພໍຜູ້ແຈ້ງການໃກ້ ລຸງບຸນມີວ່າ:ໂອ່ ລູກຂ້ອຍນີ້ ຜູ້ໃດຄືແນ່ ໄປໂລດ ແມ່ນບຸນຂ້ອຍບໍ່ຈັ່ງວ່າ.

ລຸງບຸນມີວ່າ: ບາດປະຊຸມແນວໂຮມເພິ່ນເຊີນຢູ່ ລຸງບຸນມີ ໂອ່! ກາຍວ່າເພິ່ນໄດ້ໄປ, ຄັນມີຄຳເຫັນເພິ່ນກໍ່ຂໍອະນຸຍາດໂລດແລ້ວ. ຜິດລຸງບຸນມີກໍ່ຂໍອະນຸຍາດແຫລະ, ແຕ່ເດີເພິ່ນວ່າຄັນຢາກໃຫ້ກໍ່ສ້າງວ່າ, ແຮງເຈົ້າແຂວງ ເອົາໂລດລຸງໆໆ ເຈົ້າແຂວງບົວເລີຍ, ເຈົ້າແຂວງຄຳບຸ່ນແຮງມີຜູ້ເດັກນ້ອຍ ກໍ່ເອີ້ນລຸງບຸນມີ ລຸງໆ. ລຸງບຸນມີເວົ້າບໍ່ຈິ່ງແຫລະ ມີອີ່ສັງເພິ່ນກໍ່ຕອບໂລດ. ບໍ່ມີວ່າດອກເຂົາຊິຮ້າຍ, ມີແຕ່ເຂົາຫົວຫັ້ນແຫລະ. ຄຳບຸ່ນກໍ່ຄືກັນແຕ່ລາວຍັງຢູ່ນີ້ລາວກໍ່ຫຼຽວມາຫາ, ລາວເອົາປາເອົາອີ່ສັງມາໃຫ້ລຸງບຸນມີ. ໂອ່ຍ ບໍ່ກິນບໍ່ປາ, ລຸງບຸນມີວ່າບໍ່ຄະລຳ, ສັງບໍ່ໄປເອົາວ່າ, ລຸງບຸນມີວ່າບໍ່ແມ່ນໝາເຫັນແກ່ກິນແຫລະ ແລ່ນໃສ່ໃຜຊິມັກ.

ລຸງບຸນຕັງ ພິມມະນີ

ເຜົ່າຕະໂອ້ຍ

(ແຂວງສາລະວັນ)

ປະຈຸບັນ ລຸງບຸນຕັງ ມີອາຍຸ 82 ປີ ຊົນເຜົ່າຕະໂອ້ຍ ຢູ່ເມືອງຕະໂອ້ຍ ແຂວງສາລະວັນ. ເພິ່ນເກີດເມື່ອວັນທີ 12 ເດືອນ 10 ປີ 1921,ທີ່ບ້ານກະເຕັນໃຫຍ່ຕາແສງດຸກ ແຂວງສາລະວັນ. ພໍ່ຂອງລຸງຕັງຊື່ ທ້າວແດງ,ພໍ່ເພິ່ນມີເມຍ 3 ຄົນ,ແມ່ຂອງລຸງບຸນຕັງເປັນເມຍຜູ້ທີ 2 ຂອງພໍ່ເພິ່ນ. ອ້າຍເອື້ອຍນ້ອງຮ່ວມພໍ່ດຽວຂອງລຸງບຸນຕັງທີ່ເກີດຈາກແມ່ທີ 3 ພໍ່ເພິ່ນມີລູກມີ 7 ຄົນ, ເປັນຜູ້ຊາຍ 2ຄົນ. ຄອບຄົວຂອງເພິ່ນລຸງບຸນຕັງເວລານັ້ນເປັນຄອບຄົວໃຫຍ່ມີ ພໍ່,ແມ່ 3 ຄົນ,ອ້າຍນ້ອງ ພວກເພິ່ນ 7 ຄົນ, ປູ່ເພິ່ນ, ນ້າບ່າວເພິ່ນ, ເມຍຂອງນ້າບ່າວເພິ່ນ ແລະ ລູກໆຂອງນ້າບ່າວເພິ່ນ. ແມ່ຂອງເພິ່ນເສຍຊີວິດແຕ່ຕອນອາຍຸເພິ່ນໄດ້ 3 ເດືອນທໍ່ນັ້ນ. ເພິ່ນເຕີບໃຫຍ່ຂຶ້ນມາດ້ວຍການລ້ຽງດູຂອງພໍ່ເພິ່ນ ແລະອ້າຍເອື້ອຍເພິ່ນ.

ຊີວິດຂອງລຸງບຸນຕັງຕອນຍັງນ້ອຍ ກໍ່ບໍ່ແຕກຕ່າງຫຍັງກັບເດັກນ້ອຍຜູ້ຊາຍລາວ ທີ່ຢູ່ເຂດນອກທົ່ວໄປທັ້ນລະ. ເມື່ອລຸງບຸນຕັງໃຫຍ່ພໍຮູ້ຈັກເຮັດວຽກໃນຄອບຄົວແລ້ວ ພໍ່ແມ່ເພິ່ນກໍ່ໃຊ້ວຽກທີ່ເພິ່ນເອງສາມາດເຮັດໄດ້ເປັນຕົ້ນແມ່ນລ້ຽງງົວ ແລະ ລ້ຽງຄວາຍຕາມພາສາບ້ານນອກ. ເວລານັ້ນເພິ່ນຈື່ໄດ້ວ່າ ພໍ່ແມ່ເພິ່ນມີງົວ 5 ໂຕ ແລະ ຄວາຍ 5 ໂຕ. ດັ່ງນັ້ນ, ແຕ່ລະມື້ເພິ່ນຈຶ່ງໄດ້ໄປລ້ຽງງົວລ້ຽງຄວາຍ 10 ໂຕນີ້ລະຊ່ວຍພໍ່ແມ່ເພິ່ນ ເພາະມັນແມ່ນຊັບສິນບັດຂອງຄອບຄົວເພິ່ນ. ຕອນລຸງບຸນຕັງເປັນເດັກ ຄອບຄົວຂອງເພິ່ນແມ່ນທຸກຍາກແຕ່ລະມື້ຕ້ອງອອກໄປເຮັດໄຮ່ ຢ່າງລຳບາກກາກກຳ. ເຂົ້າປາອາຫານການກິນກໍ່ບໍ່ມີ, ເຂົ້າກິນກໍ່ຂາດໆເຂີນໆ, ແຕ່ໃນໄລຍະຕໍ່ມາພໍ່ເພິ່ນເລີຍມີແນວຄິດ ໄປຄ້າຂາຍຂອງດີ [37] ພໍ່ຂາຍຂອງດີ ຍິງບໍ່ລັ່ນຟັນບໍ່ເຂົ້າ, ໄປຕົວະຢູ່ເມືອງໄຫວ່າດີແທ້.

---

[37] ຂອງດີໝາຍຄວາມວ່າເຄື່ອງຄົງ,ຍິງບໍ່ເຂົ້າ,ເຜົາບໍ່ໄໝ້.

ແລ້ວພໍ່ເພິ່ນກໍ່ໃຫ້ພວກເຂົາເອົາໂຕ ຂອງເພິ່ນເປັນເຄື່ອງທົດລອງ ເຊັ່ນ: ເອົາພ້າຟັນ,ເອົາງ້າວຟັນກໍ່ບໍ່ເຂົ້າອັນນີ້ມີແທ້ເພິ່ນວ່າ. ເຄື່ອງດີນີ້ເຂົາເອີ້ນວ່າເຄື່ອງຄົງ (ເຄື່ອງຄົງແມ່ນມີສອງຜົວເມຍກິນມັນດ້ວຍທອງ, ປາດທອງໃຫ້ມັນກິນ ລ້ຽງມັນ ມັນກິນກຸ້ມ 7 ວັນ). ພໍ່ເພິ່ນກໍ່ໄປຕົວະນຳໄທວ່າ : "ຂ້ອຍມີເຄື່ອງຄົງ" ໄທເຂົາຢາກໄດ້ຂອງດີເຂົາບອກວ່າ: ລາຄາເທົ່າໃດເຂົາກໍ່ຊື້. ຕໍ່ມາເພິ່ນກໍ່ເອົາຫົວຫວ້ານໄປຕົວະອີກ ພໍ່ເພິ່ນມີຫົວຫວ້ານ 3-4 ຊະນິດຢູ່ໃນຖົງ[38]. ພໍ່ເພິ່ນໄປຕົວະວ່າ: ຫວ້ານນີ້ແມ່ນຫວ້ານສະເໜຈັນ, ຫວ້ານອັນນີ້ແມ່ນຫວ້ານຄົງ, ຫວ້ານອັນນີ້ແມ່ນຫວ້ານພິດສະຫຼົກ ສໍ່າປືນຜາໜ້າກະບອກຍິງບໍ່ຖືກ, ປືນແກັບປືນເພີງຍິງບໍ່ຖືກ. ພໍ່ເພິ່ນເວົ້າໄປນຳແລະສະເໜີຫວ້ານໄປນຳ ພວກເຂົາກໍ່ພາກັນຊື້ນຳພໍ່ເພິ່ນເອົາແທ້ເອົາວ່າ ພໍ່ເພິ່ນປາດໃຫ້ໜ້ອຍໜຶ່ງ (ງິມໜຶ່ງ) ກໍ່ໄດ້ ເງິນກີບເກົ່າ 2-5 ຫຼຸນ. ພໍ່ເພິ່ນບໍ່ສະເພາະແຕ່ໃນກຸງເທບເທົ່ານັ້ນ. ແຕ່ເພິ່ນຍັງອອກໄປຕົວະເຖິງເຂດບ້ານນອກຄອກນາຂອງໄທຕື່ມອີກ. ພໍ່ເພິ່ນໄປຊຸດໜຶ່ງກັບມາກໍ່ໄດ້ເງິນເປັນຈຳນວນຫຼວງຫຼາຍຊຶ່ງຕໍ່າສຸດກໍ່ໄດ້ຢູ່ປະມານ 70-100 ກີບເກົ່າ (ກີບຫົວໜາມ) ເປັນຕະກຸນເງິນໃນສະໄໝຝຣັ່ງ ເພາະໄລຍະນັ້ນລາວໃຊ້ເງິນສະກຸນກີບເກົ່າ. ຫຼັງຈາກເລາະຕົວະໝົດເມືອງໄທແລ້ວ ພໍ່ລຸງຕັງກໍ່ມາເລາະຕົວະຢູ່ເມືອງລາວຕໍ່ ພໍ່ລຸງຕັງຈະມີເຄື່ອງນຸ່ງ ສາມຊະນິດທີ່ພໍ່ເພິ່ນກຽມເອົາໄປນຳຊະນິດໜຶ່ງແມ່ນມີເກີບໂຊ ຊຶ່ງມີສິ້ງເສື້ອຂອງລາຊະການຮ້ອຍປີເຊັ່ນ ແລະມີກາລະວັດເປັນເຄື່ອງເອ້ຂອງພໍ່ເພິ່ນ. ເຄື່ອງຊະນິດທີສອງແມ່ນຜ້າກະຕ່ຽວ 5 ວາ-7 ວາ ແລະ ຊະນິດທີສາມແມ່ນມີສິ້ງສະຫຼົບແລະສິ້ງສັ້ນ. ແຕ່ລະຄັ້ງໄປຕົວະຊາວບ້ານພໍ່ເພິ່ນຈະເອົາເຄື່ອງປະດັບ ແລະເຄື່ອງເອ້ນັ້ນໄປພ້ອມ ເມື່ອພໍ່ເພິ່ນໄປຮອດບ້ານ ເຈົ້ານາຍກໍ່ແມ່ນນຸ່ງສິ້ງເສື້ອຊາດໄປຂໍ ພໍ່ເພິ່ນໄດ້ໄປຂໍນຳເຈົ້າສຸວັນນະພູມມາ, ບາດພໍ່ເພິ່ນໄປຫາປະຊາຊົນ ແມ່ນນຸ່ງກະຕ່ຽວບັກຍາວລາກດິນໄປພ້ອມທັງແຕ່ງລວດລາຍ, ມີເຄື່ອງປະກອບໃສ່ໝາກປັດແບບໝໍມົນໝໍກາຖາ, ມີ

---

38 ຫົວຫວ້ານແມ່ນຊະນິດພືດທີ່ເຂົາປູກ ຫາກເປັນຂອງດີ ຍິງບໍ່ແຕກ ຍິງບໍ່ເຂົ້າ... ຫວ້ານສະເໜ່ແມ່ນເພື່ອສຳລັບໃສ່ຜູ້ສາວກໍ່ມັກໂລດ, ໄປຫາເຂົາກໍ່ມັກໂລດ.

ຖົງດຳຖົງແດງ, ລາວຜູ້ດຽວມີຮອດ ສາມສີ່ຖົງ ໃນຖົງໜຶ່ງໆ ມີແພແສດດຳ ແສດແດງ, ແສດຂຽວໃສ່ທາງຂ້າງຖົງເພື່ອໃຫ້ເຂົາເຫັນວ່າມີລິດມີເດດ. ຫຼັງຈາກນັ້ນພໍ່ເພິ່ນຂຶ້ນໄປຮອດຊຽງຂວາງທົ່ງໄຫຫີນ ທັງຕົວະທັງຂໍໄປນຳໂດຍອີງຕາມຄວາມເໝາະສົມຂອງແຕ່ລະເຫດການ. ແນວນັ້ນລະອາຊີບຂອງພໍ່ລຸງຕັ້ງໃນສະໄໝຝຣັ່ງປົກຄອງ. ເມື່ອພໍ່ເພິ່ນໄປຕົກຢູ່ເມືອງໄທ ເຂົາເອີ້ນພໍ່ເພິ່ນວ່າ: ອ້າຍກົກ 39 ເຂົາຖາມວ່າຢູ່ໃສ? ພໍ່ເພິ່ນບອກວ່າຢູ່ສາລະວັນ. ເຂົາເບິ່ງເຄື່ອງນຸ່ງເຂົາກໍ່ເຂົ້າໃຈວ່າແມ່ນອ້າຍກົກໂລດ ນັ້ນລະຄືວິທີຂອງພໍ່ເພິ່ນເຮັດ. ມີເທື່ອໜຶ່ງພໍ່ເພິ່ນໄປຕົວະຢູ່ເມືອງໄທໄດ້ເຄື່ອງເກົ່າເຄື່ອງແກ່ ເປັນຕົ້ນແມ່ນ ໝໍ້ທອງ 5 ຫູ, ໝໍ້ທອງ 4 ຫູ ຊຶ່ງເປັນມູນມັງທີ່ເກົ່າແກ່ທີ່ເຂົາຜະລິດແຕ່ລຸງບຸນຕັ້ງຍັງບໍ່ທັນເກີດ ແລະເງິນຄຳຈຳນວນໜຶ່ງ, ພໍ່ເພິ່ນໄດ້ສັ່ງໃຫ້ລູກນ້ອງປະມານ 20 ປາຍຄົນຫາມມາ ແລ້ວກັບມາຂ້ວາມນ້ຳຂອງຢູ່ທາງວຽງຈັນ. ພໍດີມີພວກປະຕິການໄທມາລັດປຸ້ນ ມັນໄປສະກັດເຮືອ ພວກເພິ່ນທີ່ຂ້ວາມຢູ່ວຽງຈັນ. ພວກມັນເຕະວັດຖຸສິ່ງຂອງພໍ່ເພິ່ນທັງໝົດ ນັບທັງມູນມັງນັ້ນລົງນ້ຳຂອງຈົນກ້ຽງ ຊຶ່ງພໍ່ເພິ່ນໄປຕົວະຖ້ຽວນັ້ນມາຖືວ່າຊວຍບໍ່ໄດ້ຫຍັງເລີຍ. ອອກຈາກວຽງຈັນພໍ່ເພິ່ນກໍ່ເດີນທາງໄປຫຼວງພະບາງຕໍ່ ພໍ່ເພິ່ນໄປກົ້ມກາບຂໍນຳເຈົ້າຊີວິດແລະເວົ້າວ່າ: "ຂ້ານ້ອຍນີ້ທຸກຍາກຫຼາຍ ສິ້ງເສື້ອຊິນຸ່ງກໍ່ບໍ່ມີ, ເຂົ້າຊິກິນກໍ່ບໍ່ມີ, ບໍ່ມີຮອດເຮືອນຢູ່" ເຈົ້າຊີວິດຖາມພໍ່ເພິ່ນວ່າ: ພໍ່ອອກຢູ່ໃສ? ພໍ່ເພິ່ນຕອບວ່າ: ຢູ່ສາລະວັນ. ເຈົ້າຊີວິດເພິ່ນຍັງຖາມຢ້ຳອີກວ່າ: ຢູ່ສາລະວັນ ຢູ່ທາງໃດ? ພໍ່ເພິ່ນກໍ່ຕອບວ່າ: ຢູ່ທາງຕາເວັນອອກທິດເໜືອຂອງສາລະວັນ.

ເມື່ອເວົ້າແນວນັ້ນເຈົ້າຊີວິດກໍ່ຮູ້ຈັກໂລດວ່າພໍ່ເພິ່ນນັ້ນມີຊື່ວ່າ: ອ້າຍກົກ[39] ແລະ ເຈົ້າຊີວິດເພິ່ນກໍ່ຍັງໄດ້ເອົາສິ້ງເສື້ອກົມເປໃຫ້ພໍ່ເພິ່ນ. ຈາກນັ້ນພໍ່ເພິ່ນກໍ່ອອກໄປຫາເລາະຕົວະເອົາເຄື່ອງເກົ່າຕື່ມ ແຕ່ບໍ່ໄດ້ຫຍັງ; ພໍ່ເພິ່ນຈຶ່ງໄດ້ກັບມາວຽງຈັນ ຖາມຫາເຈົ້າສຸວັນນະພູມມາ ເພື່ອໄປຂໍສິ້ງເສື້ອຂາດໆນຳເພິ່ນ; ພໍ່ເພິ່ນ

---

[39] ບັນດາເຜົ່າລາວໄຕ ເອີ້ນບັນດາເຜົ່າມອນຂະແມ ຫຼືວ່າ ລາວເທິງວ່າອ້າຍກົກ, ຂອງເຂົາເຈົ້າຖືວ່າພວກລາວເທິງນີ້ ມາຢູ່ເຂດນີ້ກ່ອນລາວໄຕ.

ໄດ້ເອົາດອກໄມ້ ແລະເອົາທຽນໄປນົບໄຫວ້ເຈົ້າສຸວັນນະພູມມາ ສຸດທ້າຍພໍ່ເພິ່ນກໍ່ໄດ້ສິ້ງເສື້ອໃຫ່ຍຄູ່ໜຶ່ງຈາກເຈົ້າສຸວັນນະພູມມາ. ຈາກນັ້ນພໍ່ເພິ່ນກໍ່ພາກັນກັບມາສາລະວັນ ພ້ອມລູກນ້ອງ 20 ປາຍຄົນ ຂອງພໍ່ເພິ່ນເພື່ອອອງເຄື່ອງມາ. ຫຼັງຈາກກັບມາຖຽວນີ້ແລ້ວ ພໍ່ເພິ່ນກໍ່ມາຢູ່ບ້ານ ພໍຢູ່ໄດ້ສາມເດືອນ ຝຣັ່ງມັນເຫັນພໍ່ເພິ່ນເປັນຄົນສະຫຼາດ ເລີຍຈັດຕັ້ງໃຫ້ພໍ່ເພິ່ນບັນຊາ 8 ໝູ່ບ້ານ ມັນເອີ້ນວ່າພໍ່ບ້ານໃຫຍ່ ແລະ ບັນຊາທັງໝົດເຂດນີ້ເພາະວ່າ ພໍ່ເພິ່ນນັ້ນເປັນເຈົ້າກົກເຈົ້າເລົ່າຢູ່ແຖບນີ້ ແຕ່ຕຳແໜ່ງຂອງພໍ່ເພິ່ນນັ້ນຍັງບໍ່ທັນຂຶ້ນເປັນນາຍເພຍເທື່ອພຽງແຕ່ເອີ້ນເຈົ້າກົກເຈົ້າເລົ່າ. ຈາກນັ້ນພໍ່ເພິ່ນກໍ່ໄດ້ເອົາແມ່ເພິ່ນເອງມາຢູ່ນຳປູ່ເພື່ອເຮັດໄຮ່ແລະລ້ຽງດູເພິ່ນ. ແນວນັ້ນລະປະຫວັດສາດຄວາມເປັນມາຂອງພໍ່ຂອງລຸງບຸນຕັງ. ສ່ວນນ້າບ່າວເພິ່ນນັ້ນ ຝຣັ່ງໄດ້ມອບໝາຍໃຫ້ເປັນສະໝຽນ (ສະໝຽນພໍ່ບ້ານໃຫ່ຍ) ມັນແຕ່ງຕັ້ງພໍ່ລຸງບຸນຕັງເປັນພໍ່ບ້ານໃຫຍ່ ແລະ ມອບໃຫ້ນ້າບ່າວລຸງບຸນຕັງນັ້ນເປັນສະໝຽນ ພໍ່ລຸງບຸນຕັງເພິ່ນເປັນຄົນມັກໄປ ເພິ່ນປະໃຫ້ນ້າບ່າວລຸງບຸນຕັງນັ້ນເຮັດວຽກແທນຢູ່ເຮືອນ; ເຮັດໄຮ່ລ້ຽງປູ່ລ້ຽງຍ່າ ແລະ ລຸງບຸນຕັງນີ້. ຕໍ່ມານ້າບ່າວລຸງບຸນຕັງກໍ່ອອກໄປໄທ ເປັນຕົ້ນແມ່ນອຸບົນ, ກຸງເທບ ແລະ ໄປໝົດພາກອີສານ, ໄປ 10 ປາຍຕົວເມືອງ ເພື່ອໄປຕົວະຕໍ່, ຕົວະແບບດຽວກັນກັບພໍ່ລຸງບຸນຕັງນັ້ນລະ, ເຄື່ອງນຸ່ງແບບດຽວທີ່ພໍ່ເພິ່ນເຄີຍເອົາໄປຕົວະພວກເຂົາ, ກະຕຸ່ງວກໍ່ບັກຍາວໆ. ເວລານັ້ນນ້າບ່າວລຸງບຸນຕັງຍັງບໍ່ທັນເອົາເມຍ ຍັງເປັນບ່າວສົດໆ ອາຍຸລະຫວ່າງ 20 ປາຍປີ ຫຼັງຈາກໄດ້ເງິນເປັນເງິນ 3 ນາງ ເງິນຂອງຍີ່ປຸ່ນຢູ່ໄທສະໄໝນັ້ນ ແລະເງິນກີບເກົ່າກໍ່ໄດ້. ລາວໄປເທື່ອໜຶ່ງໄດ້ 30 ກີບ, ລາວໄປເທື່ອສອງໄດ້ 25 ກີບ, ໄດ້ຍ້ອນເລາະຫາຕົວະເຂົາແນວນີ້ລະ, ຈຸ້ນີ້ແມ່ນຈຸເຊື້ອສາຍຕົວະເດ. ສຸດທ້າຍນ້າບ່າວຂອງລຸງບຸນຕັງມີເງິນຫຼາຍ, ກໍ່ເອົາເມຍ ເອົາເງິນທີ່ເພິ່ນຫາມາໄດ້ນີ້ລະແຕ່ງ; ແຕ່ງແລ້ວພາກັນຢູ່ພາກັນເຮັດກັນສ້າງເສດຖະກິດຄອບຄົວເຊັ່ນ: ເຮັດໄຮ່, ສ້າງເຮືອນສ້າງຊານ. ສ່ວນພໍ່ລຸງບຸນຕັງນັ້ນສຸດທ້າຍກໍ່ບໍ່ມີຫຍັງ ມີແຕ່ຄວາຍ, ແລ້ວພໍ່ເພິ່ນກໍ່ເອົາຄວາຍ

ນັ້ນມາແຕ່ງເນຍ ໄດ້ເນຍແລ້ວງົວຄວາຍກໍ່ໝົດໄປ. ເປັນແນວນັ້ນລະປະຫວັດສາດຄອບຄົວຂອງພໍ່ລຸງບຸນຕັງແຕ່ສະໄໝກ່ອນ.

ພາຍຫຼັງສົງຄາມໂລກຄັ້ງທີໜຶ່ງໄດ້ສິ້ນສຸດລົງ; ຕໍ່ໃສ່ສົງຄາມໂລກຄັ້ງທີສອງ ປີ 1945 ຊຶ່ງໃນເວລານັ້ນ ໄດ້ມີຂະບວນການຕໍ່ສູ້ຕ້ານພວກຝຣັ່ງຂອງພໍ່ກະດວດແລະອົງແກ້ວອົງກົມມະດຳ[40]. ອົງແກ້ວອົງກົມມະດຳ ໄດ້ເຊີນທັງໝົດເຈົ້າກົກເຈົ້າເລົ່າທີ່ຢູ່ອ້ອມແອ້ມເຂດນັ້ນໄປພູຫຼວງ [41] ໄປພົບອົງແກ້ວອົງກົມມະດຳເພື່ອປະຊຸມ. ນ້າບ່າວຂອງລຸງບຸນຕັງບໍ່ໄດ້ໄປມີແຕ່ພໍ່ເພິ່ນໄປ. ພໍ່ລຸງບຸນຕັງໄປເອົາຕາພັນຊອບ ມາໃສ່ນ້ຳມົນ ແລະຄາຖາຂອງອົງແກ້ວ ຢາຍໃຫ້ທຸກຄົນກິນ[42] ແລ້ວກໍ່ຕັກເຕືອນວ່າ "ຈັກກະພັດຝຣັ່ງມາຮຸກຮານບ້ານເຮົາ, ຂົ່ມເຫັງບັງຄັບພວກເຮົາ, ພວກເຮົາບໍ່ຄວນຍອມພວກຝຣັ່ງ ແລະພວກເຮົາຄວນຄັດຄ້ານ. ໜຶ່ງພວກເຮົາຄວນປົກປັກຮັກສາພົນລະເມືອງ, ປະຊາຊົນບໍ່ໃຫ້ເປັນຂ້ອຍຂ້ານ້າຕ່າງຂອງຝຣັ່ງ, ອັນທີສອງບໍ່ໃຫ້ໄປເປັນທະຫານຝຣັ່ງໝົດເມືອງຕະໂອ້ຍ ແມ່ນໃຫ້ເຈົ້ານຳພາ ແລະ ອັນທີສາມໃຫ້ເຊື່ອງກຳລັງພົນ. ສົມມຸດວ່າກຳລັງຄົນຢູ່ເຂດນີ້ ເຮົາມີຮອດ 100 ຄົນ ກໍ່ໃຫ້ລາຍງານພຽງແຕ່ 30-40 ຄົນ ເຂົ້າບັນຊີຂອງຝຣັ່ງ". ທັງໝົດນັ້ນແມ່ນອົງແກ້ວເພິ່ນຈົ່ມມົນໃສ່ໃນນ້ຳແລ້ວທຸກຄົນສາບານຕໍ່ນ້ຳມົນນີ້ແລ້ວເອົາເມືອກິນ. ພ້ອມນັ້ນອົງແກ້ວກໍ່ໄດ້ສ້າງຕາຈ້ຳ (ກາຈ້ຳ) ຂອງອົງແກ້ວມາເປັນພັນໆໃບພຸ້ນ, ພໍ່ຂອງລຸງບຸນຕັງເອົາມາໃສ່ຖົງບັກໃຫຍ່ອອງມາແລ້ວໄປແຈກຢາຍໃຫ້ໝົດທຸກຄົນທົ່ວເມືອງຕະໂອ້ຍ ທັງໄປໂຄສະນາເຜີຍແຜ່ທັງເອົາຕາຂອງອົງແກ້ງກົມມະດຳໄປຢາຍ ແລະ ຕ້ອງໄປຕາມແນວທາງຂອງພວກເພິ່ນແນວນັ້ນ. ສ່ວນນ້ຳມົນນັ້ນພວກເພິ່ນໃຫ້ກິນ ແລະ ບູຊາລຸງບຸນຕັງກໍ່ໄດ້ກິນ, ຫຼັງຈາກກິນແລ້ວຕົບໃສ່ຫົວຕົນເອງພ້ອມ. ຈາກນັ້ນແລ້ວພໍ່ເພິ່ນກໍ່ເອົາ

---

40 ພໍ່ກະດວດແມ່ນເຜົ່າກະຕ່າງ; ອົງແກ້ວແມ່ນແງະ (ກຣຽງ) ອົງກົມມະດຳເຜົ່າລະເວນ (ຢຣຸ)

41 ພູຫຼວງຢູ່ເມືອງປາກຊ່ອງຈຳປາສັກ

42 ພໍ່ຂອງພໍ່ເຖົ້າບຸນຕັງເພິ່ນໄປປະຊຸມແລະເອົາມົນ, ການປະທັບຂອງອົງແກ້ວ ອົງກົມມະດຳມາຢາຍໃຫ້ປະຊາຊົນ.

ນ້ຳມິນນີ້ໄປຢາຍໃຫ້ປະຊາຊົນກິນ ແລະ ໂຄສະນາຕໍ່ວ່າ: ອັນນີ້ແມ່ນນ້ຳມິນຄາຖາດີຂອງອົງແກ້ວກົມມະດຳເຮົາເດີ ເຊື້ອສາຍເຮົານີ້ລະລາວເທິງເຮົານີ້ລະຄົນລະເວນເຮົານີ້ລະ ມີມົນຄາຖາປັນຍາຫຼາຍແນວນີ້ ເພິ່ນຍັງອ່ອຍພອນໃຫ້ໝັ້ນໃຫ້ຢືນໝົດທຸກຄົນຢ່າເຈັບຢ່າໄຂ້ເດີ ແລະ ໃຫ້ຮັກແພງສາມັກຄີຊ່ວຍຊາດຈັ່ງຊັ້ນແລ້ວ ພໍ່ເພິ່ນໄດ້ໄປປ່າວເຕືອນໄປແຕ່ລະບ່ອນ.

ເມື່ອປີ 1930 ໄດ້ມີພັກຂອງໂຮ່ຈີມິນ ນຳພາຈົນຕົກມາຮອດປີ 1945 ກະແສຂອງການຕໍ່ສູ້ກັບພວກຍີ່ປຸ່ນຂຶ້ນສູງ. ເພື່ອຮອງຮັບກະແສຟອງດັ່ງກ່າວພໍ່ລຸງບຸນຕັງອອກໄປຫວຽດນາມ ໄປປະຊຸມຢູ່ກະແຊ້ງ ກຳໂລ້ ດົງຮ່າພຸ້ນ ເພື່ອປະຊຸມປຶກສາຫາລື ແລະ ເຊັນສັນຍາກັບຫວຽດນາມ. ຈາກນັ້ນຫວຽດນາມກໍ່ໄດ້ປະກອບປືນເມັດສະນິວ ກະບອກໜຶ່ງໃຫ້ພໍ່ລຸງບຸນຕັງ ແລະເວົ້າວ່າ: ອັນນີ້ເດີມອບໃຫ້ຕຳແໜ່ງໃຫ້ເຈົ້າທັງໃຫ້ເຈົ້າປ້ອງກັນຕົວ ທັງໃຫ້ເຈົ້າຮັບຜິດຊອບເປັນພະນັກງານເຄື່ອນໄຫວອື່ນໆ. ສ່ວນຜູ້ອື່ນຍັງບໍ່ທັນມີປືນມອບໃຫ້ເຈົ້າເປັນຜູ້ນຳພາກໍ່ສ້າງ ແລະ ຂະຫຍາຍພື້ນຖານຢູ່ເມືອງຕະໂອ້ຍເດີ. ເຂົາວ່າ: ພໍ່ຕັງເອີຍ! ໃຫ້ເຈົ້າເລັງໃສ່ຜູ້ໃດທີ່ມີອິດທິພົນ ຜູ້ໃດທີ່ເປັນເຈົ້າກົກເຈົ້າເລົ່າພາຍໃນບ້ານເປັນຂັ້ນໃດກໍ່ຕາມໃຫ້ເຈົ້າດຶງເອົາໝົດ. ເຖິງຈະເປັນພໍ່ບ້ານໃຫຍ່ ເປັນຕາແສງຂອງພວກຝຣັ່ງກໍ່ຕາມໃຫ້ເຈົ້າດຶງເອົາໃຫ້ໄດ້, ຂອງແນວວ່າຄົນເຜົ່າອັນດຽວກັນເວົ້າງ່າຍໆ. ເມື່ອໄດ້ຍິນແນວນັ້ນພໍ່ບຸນຕັງກໍ່ເຈົ້າໆໂລດແລ້ວ. ຕໍ່ມາຮອດວັນທີ 10 ເດືອນ 5 ຝຣັ່ງມາເຖິງສາລະວັນຮອດເມືອງຕະໂອ້ຍ ຮອດແຕ່ບ້ານຕຸ້ມລີເກົ່າຊຶ່ງພວກມັນມາຮອດກອງຮ້ອຍໜຶ່ງ. ຫຼັງຈາກນັ້ນ ພໍ່ລຸງບຸນຕັງກໍ່ແຕ່ງໃຫ້ນ້າບ່າວລຸງຕັງເປັນຜູ້ໄປເອົາກອງທັບຫວຽດນາມບວກກັບກຳລັງພວກເຮົາ ມາຕີຝຣັ່ງ ພວກເຮົາດັບສູນພວກທະຫານຝຣັ່ງໄດ້ທັງໝົດ 72ບັກ ໃນນີ້ຝຣັ່ງ 12 ອົງຕາຍກັບບ່ອນ. ພໍເຖິງປີ 1946 ຝຣັ່ງແຕກເສິກຍີ່ປຸ່ນ, ຝຣັ່ງ 50ຄົນ ໄດ້ແຕກໄປທາງຕະໂອ້ຍ ພໍ່ລຸງຕັງໄປເອົາກຳລັງຢູ່ສາລະວັນ ບວກກັບກຳລັງໂຕເອງໄປຕີຝຣັ່ງ ຈັບຝຣັ່ງໄດ້ 3ຄົນ ແລະ ກໍ່ຈັບຫວຽດນາມ ນາຍພາສາທີ່ໄປກັບຝຣັ່ງ ລວມທັງໝົດພໍດີ 6 ຄົນ ແລະ ຂ້າຝຣັ່ງຕາຍກັບບ່ອນອີກຜູ້ໜຶ່ງ. ຕອນ

ບັນສົງຄາມໂລກຄັ້ງທີສອງກຳລັງວຸ້ນວາຍຂຶ້ນ ຍັງເປັນຂະບວນໃຫຍ່ຂຶ້ນຢູ່ ບໍ່ທັນໄດ້ສະຫງົບຍັງເລວກັນຢູ່. ຫຼັງຈາກພວກຝຣັ່ງຕາຍແລ້ວ ຝ່າຍພວກເຮົາໄດ້ເອົາຍີ່ປຸ່ນຢູ່ມີຈຳນວນ 12 ຄົນ ໄປບວກກັບກຳລັງກອງຫຼອນຢູ່ໃນບ້ານ ແລ້ວຕີຝຣັ່ງ ຢູ່ກົງເຕດ ຈັບຫວຽດ ແລະ ຝຣັ່ງໄດ້ອີກຈຳນວນໜຶ່ງ ແລ້ວສົ່ງໃຫ້ຍີ່ປຸ່ນໄປນຳ, ພ້ອມທັງຕີໄປນຳ ເປັນຫູເປັນຕາໃຫ້ພວກລຸງບຸນຕັ້ງແນວນັ້ນ ລະພວກຍີ່ປຸ່ນມັນວ່າຕໍ່ມາແມ່ນພວກເຂົາໄດ້ເອີ້ນລຸງບຸນຕັ້ງນີ້ໄປກວາງຈີ ເພື່ອເຂົ້າພົບຄະນະແຂວງກວາງຈີ ເຊິ່ງເວລານັ້ນຜູ້ບັນຊາການແຂວງກວາງຈີ ແມ່ນສະຫາຍຫງຸນ. ໃນທ້າຍປີ 1946 ຫາຕົ້ນປີ 1947 ລຸງບຸນຕັ້ງກັບມາແຕ່ຫວຽດນາມ ແລະ ກໍ່ຖືກຊັບຊ້ອນເຂົ້າຢູ່ໃນກອງທັບລາວ ຢູ່ກອງຮ້ອຍເອກກະລາດຂອງລຸງບຸນຕັ້ງ ເອງ[43]. ໃນກອງຮ້ອຍເອກກະລາດຂອງເມືອງຕະໂອ້ຍ ແມ່ນລຸງບຸນຕັ້ງເປັນຜູ້ບັນຊາການໂດຍກົງ, ແລ້ວລຸງບຸນຕັ້ງກໍ່ເພີ່ມກຳລັງຕື່ມໃຫ້ເຕັມກອງຮ້ອຍຊຶ່ງມີຈຳນວນພົນປະມານ 150 ຄົນພຸ້ນແລະລວມແລ້ວກໍ່ມີແຕ່ຄົນຕະໂອ້ຍລ້ວນໆບໍ່ໄດ້ເອົາຜູ້ອື່ນ, ເອົາແຕ່ຄົນທີ່ໄວ້ເນື້ອເຊື່ອໃຈ ແລ້ວກໍ່ພາກັນເຄື່ອນໄຫວຕີຝຣັ່ງ, ຝຣັ່ງມາຍາມໃດກໍ່ຕີຍາມນັ້ນ ມາສາມຄົນກໍ່ຕີ ມາຫ້າຄົນກໍ່ຕີ ເຮັດຢູ່ຈັ່ງຊັ້ນບໍ່ໄດ້ຂາດ ບໍ່ມີລູກປືນກໍ່ໄປຂໍເອົາ(ເອົານຳສັດຕູ) ເອົາປືນສັດຕູຕີສັດຕູລູກປືນກໍ່ເອົາຂອງສັດຕູ ການນຸ່ງການຖືກໍ່ເອົາຂອງສັດຕູ. ຫຼັງຈາກນັ້ນແລ້ວ ພໍ່ເພິ່ນຖືກແຕ່ງຕັ້ງໃຫ້ເປັນສາຂາເມືອງຕະໂອ້ຍ, ເພິ່ນເອີ້ນວ່າຮອງເຈົ້າເມືອງຕະໂອ້ຍ. ບາດນີ້ຮອງມາແມ່ນອາກົງ(ພໍ່ຕັ້ງ) ເປັນຮອງປະທານເມືອງ ເຊິ່ງແຕ່ກ່ອນເພິ່ນໄດ້ເປັນຜູ້ປົກຄອງເມືອງຕະໂອ້ຍ ຄົນທຳອິດໃນປີ 1945-1946-1947. ໃນຕອນນັ້ນພັກກໍ່ບໍ່ທັນມີ ມີແຕ່ພັກອິນດູຈີນທີ່ກຳລັງເລີ່ມຕົ້ນມາຈາກຫວຽດນາມ ແລະ ກໍ່ເລີ່ມຕົ້ນມາສ້າງຢູ່ເມືອງຕະໂອ້ຍ ໂດຍອີງໃສ່ສະເພາະແຕ່ຄວາມຕື່ນຕົວຄວາມຄຽດແຄ້ນຊື່ໆ ນຳພາປານນັ້ນກໍ່ຍັງດຶງເອົາໄດ້ໝົດເຂດໜຶ່ງ

---

[43] ລຸງບຸນຕັ້ງທຳອິດເຄື່ອນໄຫວອິດສະຫຼະນຳພໍ່ເພິ່ນແລະຫວຽດມິນ. ປີ 1947 ເພິ່ນໄດ້ກັບມາແຕ່ຫວຽດນາມແລະຈັດຕັ້ງກອງຮ້ອຍເອກກະລາດຢູ່ເມືອງຕະໂອ້ຍຊຶ່ງມີແຕ່ຄົນຕະໂອ້ຍ.

ໝົດ ສອງຕາແສງສາມຕາແສງຕໍ່ໆໄປ ຈົນຂະຫຍາຍໄປຮອດບັນດາຕາແສງຕ່າງໆໃນທົ່ວເມືອງ.

ເຖິງແມ່ນວ່າເຂົາເຈົ້າເຮັດນຳຝຣັ່ງກໍ່ຕາມ, ແຕ່ວ່າຈິດໃຈຂອງເຂົາຍັງເປັນອິດສະຫຼະຢູ່. ມາຮອດປີ 1947 ເລຂາກອງພັນໄຕຢຸງ[44], ໃຫ້ລຸງບຸນຕັ້ງເມືອຮັບຜິດຊອບ ແລະສ້າງພື້ນຖານ ໃຫ້ແໜ້ນແກ່ນໃນຕົວເມືອງຕ່າງໆເຊັ່ນ: ເມືອງຕະໂອ້ຍ, ເມືອງນອງ ເຜົ່າມະກອງ, ເຜົ່າກະຕາງ ເມືອງຕຸ້ມລານ, ເມືອງກະລຶມ, ກະຕູ່, ແງະ, ອາລັກ, ໃຫ້ເຈົ້າກຳໝົດເຂດນີ້ ໃນຕອນນັ້ນຖືວ່າລຸງບຸນຕັ້ງມີອິດທິພົນຢູ່ເຂດນັ້ນ ລຸງບຸນຕັ້ງຢາກໄປທາງອາລັກກໍ່ໄດ້, ຢາກໄປທາງແງະກໍ່ໄດ້, ໃຜກໍ່ຮູ້ລຸງບຸນຕັ້ງໝົດ ເພາະວ່າລຸງບຸນຕັ້ງເປັນຄົນຊ່າງເວົ້າຊ່າງລົມ, ເປັນຄົນມີສະເໜປາກ, ເປັນຄົນມີບຸນມີສິນທຳແຕ່ເວລາເພິ່ນຍັງຢູ່ນຳພໍ່ແມ່ ຖືວ່າພໍ່ແມ່ຂອງເພິ່ນກໍ່ຮັກລຸງບຸນຕັ້ງໝົດ ຖືວ່າເປັນທີໜຶ່ງ ແລະ ຍອດຮັກໝົດອ້າຍໝົດນ້ອງເປັນຂອງລຸງບຸນຕັ້ງຜູ້ດຽວເພາະວ່າ ລຸງບຸນຕັ້ງບໍ່ໄດ້ຖຽງຄວາມພໍ່ແມ່ເພິ່ນຈັກເທື່ອ, ບາງເທື່ອພໍ່ເພິ່ນຍັງໄດ້ເວົ້າວ່າລູກເອີຍ! ເພິ່ນເຮັດແນວໃດລູກກໍ່ຕ້ອງເຮັດແນວນັ້ນຫັ້ນແລ້ວເຮັດການປະຕິວັດ ລຸງບຸນຕັ້ງກໍ່ຕ້ອງໄປນຳການປະຕິວັດ. ດຽວນີ້ພໍ່ເພິ່ນໄດ້ຕັດສິນໃຈ ໄປນຳການປະຕິວັດ, ໄປນຳພັກນຳລັດເວົ້າແຈ້ງແນວນັ້ນລະ.

ນີ້ແມ່ນອັນໜຶ່ງ ທີ່ພໍ່ເພິ່ນບອກເພິ່ນ, ອັນທີສອງ ພໍ່ເພິ່ນບອກເພິ່ນລະບໍ່ໃຫ້ກິນເຫຼົ້າກິນຢາຫຼາຍ, ບໍ່ໃຫ້ຕົວະບ້ານຕົວະເມືອງ, ບໍ່ໃຫ້ຫຼິ້ນການພະນັນຫຼາຍ, ບໍ່ເອົາລູກເອົາລູກເອົາເມຍເຂົາ, ບໍ່ຂົ່ມເຫັງເຕັງເຕັກເຂົາ, ບໍ່ໃຫ້ອວດບໍ່ໃຫ້ຄຸຍ, ຕ້ອງຖະໜອມຕົວໃຫ້ເຂົາຮັກເຂົາແພງ, ຕ້ອງເຂັ້ມງວດໂດຍເດັດຂາດແມ່ນບໍ່ໃຫ້ເອົາຂອງປະຊາຊົນ ອັນນີ້ລະແມ່ນຄຳສອນຂອງພໍ່ເພິ່ນ. ເພິ່ນຍັງເວົ້າອີກວ່າ: ເຮັດຈັ່ງໃດໃຫ້ປະຊາຊົນຮັກເຈົ້າ ແພງເຈົ້າ, ເຮັດແນວໃດລູກຊິເຮັດການປະຕິວັດລອດ, ຄັນຊັ້ນເຮັດການປະຕິວັດບໍ່ລອດ. ພໍ່ເພິ່ນໄດ້ເວົ້າວ່າ ເຖິງແມ່ນວ່າເຈົ້າຍັງບໍ່ທັນໄດ້ເຮັດການປະຕິວັດກໍ່ຕາມ, ແຕ່ວ່າເຈົ້າຕ້ອງເຮັດໃຫ້ມີ

---

44 ໄຕ່ຢຸງແມ່ນຊື່ກອງພັນທະຫານຫວຽດມິນ (ກອງພັນກ້າວໄປຫາທິດໄຕ້)

ບິດບາດເຮັດໃຫ້ເຂົາເຈົ້າຮັກແພງ ເວົ້າແລ້ວກໍ່ຍ້ອນພໍ່ຂອງເພິ່ນສັ່ງສອນແນວນັ້ນລະ ເພິ່ນຈຶ່ງເປັນຄົນທີ່ມີໝູ່ຄູ່ຫຼາຍ, ມີຄົນຮັກຄົນແພງຫຼາຍ ແລະ ໄປໃສມາໃສຄົນເຂົາກໍ່ຕ້ອງເຄົາລົບນັບຖືເພິ່ນ ແລະຢຳເກງ ຫຼື ເວົ້າວ່າເພິ່ນໄປໃສກໍ່ບໍ່ຕາຍ. ສ່ວນເລື່ອງມີນກິນຄາຖານີ້ ຖືວ່າພໍ່ເພິ່ນແມ່ນບໍ່ໄດ້ສອນຫຍັງໃຫ້ເລີຍ, ແມ່ນແຕ່ວິທີທີ່ເພິ່ນເຄີຍຫາກິນໄປເລາະຕົວະນັ້ນ, ພໍ່ເພິ່ນກໍ່ຍັງບໍ່ເຄີຍໄດ້ບອກວິທີວ່າຕົວະແນວນັ້ນແນວນີ້, ເຮັດແນວໃດຊິໄດ້ເງິນຄຳຫຼາຍ ຕົວະແນວນັ້ນແນວນີ້ ຕົວະນຳຄູບາອາຈານ ຕົວະນຳປະຊາຊົນພົນລະເຮືອນເດ ແມ່ນເຮັດແນວໃດພໍ່ເພິ່ນກໍ່ບໍ່ໄດ້ສອນໃຫ້ເລີຍ ຄືຊິແມ່ນພໍ່ເພິ່ນເຂົ້າຈິ່ມວ່າ ມັນບາບມັນເວນ ມັນຫາກິນບໍ່ຂຶ້ນບໍ່ເກີນຕີເບາະ ຈຶ່ງບໍ່ຢາກສອນໃຫ້ລູກໃຫ້ຫຼານ.

ເມື່ອລຸງບຸນຕັງ ອາຍຸ 12-13 ປີ ຕາມທຳມະດາຢູ່ບ້ານນອກຄອກນາແມ່ນເອົາເມຍແລ້ວ ແຕ່ຕອນນັ້ນພໍ່ເພິ່ນຍັງບໍ່ໄດ້ບັງຄັບໃຫ້ລຸງບຸນຕັງເອົາເມຍດອກ. ຊິເອົາແນວໃດຂອງວ່າລຸງບຸນຕັງອອກໄປຢູ່ປ່າແລ້ວ, ລຸງບຸນຕັງເລີ່ມອອກເຮັດການປະຕິວັດແລ້ວເວລານັ້ນ ລຸງບຸນຕັງບໍ່ໄດ້ເອົາເມຍຈົນຮອດລຸງບຸນຕັງອາຍຸໄດ້ 30 ປີ ຈຶ່ງເອົາເມຍ. ພໍ່ເພິ່ນຢາກແຕ່ງໃຫ້ຢູ່ແຕ່ເພິ່ນບໍ່ເອົາ, ບໍ່ໄດ້ລົມຮອດຜູ້ສາວ, ລົມກໍ່ລົມທຳມະດາ ຂອງແນວວ່າລຸງບຸນຕັງອອກໄປຢູ່ປ່າເດລຸງບຸນຕັງບໍ່ຈື່ຈຳຄວາມເວົ້າຂອງພໍ່ເພິ່ນທີ່ໄດ້ເວົ້າວ່າ: ເຈົ້າເວົ້າໂລງ ເລງ ນຳພໍ່ແມ່ປະຊາຊົນບໍ່ໄດ້ໃດ໋ ເວົ້ານຳຜູ້ເຖົ້າຜູ້ແກ່ນີ້ປາກໃຫ້ມີສິນທຳ ເພາະເຂົາເຊື່ອຖືບໍ່ຕົວະເອົາເງິນປະຊາຊົນ, ຄວາມເວົ້າຄວາມຈາບໍ່ຄຸຍໂມ້ນຳເຂົາ, ໄປໃສຕ້ອງເຄົາລົບເຂົາເຈົ້າ, ບໍ່ໃຫ້ຕົວະເອົາອັນນັ້ນອັນນີ້ລູກເອີຍ ອັນນີ້ ລຸງບຸນຕັງປະຕິບັດໄດ້ຮ້ອຍສ່ວນຮ້ອຍ.

ສ່ວນແມ່ລ້ຽງລຸງບຸນຕັງຫັ້ນ ຕອນເພິ່ນຍັງມີຊີວິດຢູ່ກໍ່ລຳບາກກາກກຳຫຼາຍ ໄປໆມາໆ, ບາງເທື່ອກໍ່ຢູ່ນຳຄອບຄົວເລີຍ. ບາດນີ້ມີແຕ່ພໍ່ເພິ່ນຫາວິທີການນຳອີງການທີ່ກ່ຽວຂ້ອງເປັນຕົ້ນແມ່ນພໍ່ບ້ານໃຫຍ່ ເພື່ອລັກລີ້ລັກຊ່ອນຝຣັ່ງ, ສ່ວນລຸງບຸນຕັງພໍ່ເພິ່ນໄດ້ມອບໄວ້ນຳນ້າສາວ ເພິ່ນເອງ ແລະ ແມ່ລ້ຽງເພິ່ນໄດ້ໄປຢູ່ນຳໄທບ້ານໃຫ້ເຂົາເຈົ້າຮັບປະກັນ. ນີ້ກໍ່ແມ່ນຮູບການຕໍ່ສູ້ດ້ານການເມືອງ

ອັນໜຶ່ງ ທີ່ພວກໄທບ້ານພາກັນປິດລັບຊ່ວຍກັນ. ລຸງບຸນຕັງອອກມາຢູ່ບ້ານໄດ້ໄລຍະໜຶ່ງກໍ່ບໍ່ທັນເສຍລັບ ເພິ່ນໄປຢູ່ນຳໄທບ້ານ ໄທບ້ານກໍ່ປົກປ້ອງເອົາ ກໍ່ແລ້ວໄປ ຝຣັ່ງມັນບໍ່ຮູ້ດອກຂອງໝົດບ້ານຮ້ອຍສ່ວນຮ້ອຍເປັນຄົນດີ ບໍ່ມີໃຜເວົ້າວ່າລູກຜູ້ນັ້ນຫຼານຜູ້ນີ້ໄປເປັນອິດສະຫຼະ! ບໍ່ມີໃຜເວົ້າເດັດຂາດ, ແຕ່ແມ່ລຸງບຸນຕັງກໍ່ເພິ່ງພາອາໄສນຳໄທບ້ານໄລຍະໜຶ່ງ, ຫຼັງຈາກນັ້ນເສຍລັບແລ້ວ ບາດນີ້ສັດຕູມັນມາຖາມຫາລຸງບຸນຕັງ ໃສເມຍເພິ່ນ! ຄອບຄົວເພິ່ນແມ່ນໃຜ! ແນວນັ້ນ. ທາງຕາແສງຕອບວ່າໄປນຳລາວແລ້ວ ມັນບໍ່ເຊື່ອ ເພາະມີນັກສືບທາງນອກມັນວ່າຍັງໆ ມັນໄປຢືນໂຈດຢູ່ນັ້ນແລະຊີ້ໃສ່ວ່າ ແມ່ນຜູ້ນີ້ໄທບ້ານ ມີແຕ່ຕົວະວ່າຜູ້ນີ້ແລ້ວແມ່ນນ້ອງສາວຂອງເພິ່ນວ່າຊັ້ນ,ເມຍເພິ່ນກໍ່ໄປນຳເພິ່ນແລ້ວ. ສຸດທ້າຍແກ້ບໍ່ຕົກມັນຖາມສໍ້ຫຼາຍ ບໍ່ໄດ້ບໍ່ແພ້ມັນ. ພໍ່ລຸງ ບຸນຕັງນີ້ສອງເມຍແລະລຸງບຸນຕັງບໍ່ໄດ້ຢູ່ຕອນນັ້ນ ລຸງບຸນຕັງຢູ່ຫວຽດນາມແລ້ວ,ເພາະວ່າຕອນນັ້ນ ລຸງບຸນຕັງໄປໆ ມາໆ ແຕ່ຫວຽດຫາລາວ, ລາວຫາຫວຽດຢູ່ຈັ່ງຊັ້ນ. ໃນໂອກາດທີ່ໄດ້ຢູ່ນຳພໍ່ແມ່ເພິ່ນນັ້ນ ສ່ວນຫຼາຍກໍ່ມີແຕ່ອາຊີບທຳມາຫາກິນທັ້ນລະ ເປັນຕົ້ນແມ່ນຫາຂວາງແຫ ເຄື່ອນໄຫວຢູ່ບ້ານ, ຢູ່ໃສກໍ່ຕ້ອງໄປຫາກິນ, ແຕ່ວ່າກະທິບກະຕ່ານີ້ບໍ່ໄດ້ເຮັດ, ນົກໝູກໍ່ບໍ່ໄດ້ກິນ ເພາະໄລຍະນັ້ນບໍ່ໄດ້ຫາກິນ.

ໃນໄລຍະເຄື່ອນໄຫວ ເພື່ອວ່າໃຫ້ມັນຄົງ ລຸງບຸນຕັງ ໄດ້ຄະລຳແນວຢູ່ແນວກິນ, ຊາກສັດປ່າທີ່ເສືອຂົບນັ້ນບໍ່ໃຫ້ກິນ, ສັດໝາຂົບກໍ່ບໍ່ໃຫ້ກິນ, ອັນນັ້ນແມ່ນປະຕິບັດຫຼັກການກິນນ້ຳມິນຂອງອິງແກ້ວກິນມະດາທີ່ໄດ້ຫ້າມໄວ້, ຂອງພໍ່ເພິ່ນແລະລຸງຕັງໄດ້ສາບານແນວນັ້ນແລ້ວ ແລະພວກເພິ່ນກໍໄດ້ກິນນ້ຳມິນອິງແກ້ວແລ້ວ, ເພິ່ນຫ້າມກໍ່ຕ້ອງໄດ້ປະຕິບັດຕາມ. ເລື່ອງລຸງບຸນຕັງພົວພັນນຳແມ່ຍ່າແມ່ຍິງນັ້ນແມ່ນທຳມະດານີ້ແລ້ວ, ໃຫ້ຖືຄືອ້າຍນ້ອງຮ່ວມສາຍແຫ່ງວກັນ, ມີແຕ່ຫ້າມບໍ່ໃຫ້ມັນເກີດເລື່ອງ, ບໍ່ແມ່ນລັກສະນະບ່າວສາວ, ບໍ່ແມ່ນລັກສະນະຊູ້ສາວ, ຖືເປັນສະຫາຍໝູ່ຄູ່ນຳກັນ ຈັບຫົວຈັບຫາງບໍ່ເປັນຫຍັງດອກ, ບໍ່ໄດ້ຄະລຳດອກ ແລະ ບໍ່ໄດ້ອວດອິ່ງທະນົງຕົວ. ຄົນອື່ນກິນກໍ່ຕາມຊາກເສືອທີ່ຖືກສັດປ່າຂົບນັ້ນ, ແຕ່ວ່າລຸງບຸນຕັງບໍ່ກິນ. ນ້ຳມິນຂອງອິງແກ້ວນີ້ພວກທະຫານທຳ

ມະດາບໍ່ໄດ້ໃສ່ ເພາະວ່າເຂົາຍັງນ້ອຍ ໄດ້ໃສ່ໄດ້ກິນແຕ່ຄົນທີ່ເປັນເຈົ້າກົກເຈົ້າເລົ່າ ຫຼື ຄົນທີ່ມີບົດບາດສັງຄົມໃນແຕ່ລະບ້ານ ແລະບ້ານໃດໃຫຍ່ ມີເຈົ້າກົກເຈົ້າເລົ່າຫຼາຍເພິ່ນໄດ້ເອີ້ນມາສາບານຕົວ ມາຂຶນຂວາຍເພື່ອໃຫ້ມັນເປັນຫູເປັນຕາຊ່ວຍກັນ. ສ່ວນຂອງດີເວລາອອກສະໜາມນັ້ນ ທີ່ວ່າຍິງບໍ່ເຂົ້າອີ່ຫຍັງນັ້ນແມ່ນວ່າ ຖືທຳມະດາແບບໄທເຮົານີ້ບໍ່ໄດ້ຕ້ອງໄດ້ຄະລຳຫຼາຍກວ່າຫັ້ນ ອັນນັ້ນແມ່ນສຳລັບພວກເພິ່ນ. ສ່ວນລຸງບຸນຕັ້ງບໍ່ໄດ້ຖືຫຍັງ ຖົງນ້ອຍຖົງໃຫຍ່ກໍ່ບໍ່ໄດ້ຖື. ໃນເວລານັ້ນລຸງບຸນຕັ້ງໄດ້ສິ້ງສັ້ນແບບຝຣັ່ງຜືນໜຶ່ງ ເປັນສິ້ງແບບສີຖົງທຳມະດາ ນອກນັ້ນແມ່ນເພິ່ນນຸ່ງກະຕຽວ. ລຸງບຸນຕັ້ງໃສ່ໝວກໜັງຂອງຝຣັ່ງທີ່ເພິ່ນຍຶດໄດ້ຕອນຕີຫັ້ນແຫລະ ຄັນເສຍໝວກໂຕນີ້ ກໍ່ບໍ່ມີຫຍັງມີແຕ່ແພມັດຫົວຫັ້ນ. ນອກນີ້ເພິ່ນກໍ່ມີແຕ່ເອົາໃບບອນປົກຫົວເວລາຝົນຕົກ ເພາະມັນບໍ່ມີແພຢາງເດ, ເພິ່ນສອນອ້າຍນ້ອງກໍ່ສອນແນວນັ້ນລະ. ຕໍ່ມາລຸງບຸນຕັ້ງໄດ້ມີກຳລັງຫຼາຍແລ້ວ ທະຫານຂອງເພິ່ນມີປະມານ 100ກວ່າຄົນ, ຫວຽດກໍ່ບໍ່ເຫັນມາຊ່ວຍລາວກໍ່ບໍ່ເຫັນມາຊ່ວຍ. ໃນປີ 1951 ແມ່ນລຸງບຸນຕັ້ງໄດ້ທະຫານຮອດ 150 ຄົນ, ໃນເວລານັ້ນພວກເພິ່ນຕັ້ງປິດຕັ້ງປ້ອມຢູ່ພູປິດລັບ. ທຳອິດຕັ້ງປ້ອມຢູ່ພູແລ້ງ ແລະ ພູຂີ້ກິ່ວ (ພູຕຣະຣາ ຕາມຄວາມຕະໂອ້ຍ). ສອງພູຕອນນັ້ນເພິ່ນຍັງບໍ່ທັນມີປືນ ຫວຽດກໍ່ຍັງບໍ່ທັນຊ່ວຍ. ໃນໄລຍະຜ່ານມານັ້ນອ້າຍເອື້ອຍນ້ອງຂອງລຸງບຸນຕັ້ງທີ່ເຂົ້າຮ່ວມການປະຕິວັດ ກໍ່ມີຢູ່ສະຫວັນມີຜູ້ຍິງ ຊຶ່ງເປັນເລຂາບໍລິຫານເມືອງພະລານໄຊ ແຂວງສະຫວັນນະເຂດດຽວນີ້ ຍັງມີຊີວິດຢູ່ຊື່ວ່າ ຄຳສາຍ, ເຫຼືອຈາກຫັ້ນແມ່ນຢູ່ເຮືອນຢູ່ບ້ານ ເອົາລູກເອົາຜົວແລ້ວກໍ່ພາກັນເຮັດໄຮ່ເຮັດນາຢູ່ຫັ້ນລະ. ສ່ວນລຸງບຸນຕັ້ງເອງ ໄດ້ແຕ່ງງານ 2ເທື່ອ, ເທື່ອທີ 1 ໄດ້ແຕ່ງງານກ່ອນຢຸດລົບໃນທ້າຍປີ 1950 ກັບນາລີ ຊິນເຜົ່າຕະໂອ້ຍ. ພວກເພິ່ນມີລູກນຳກັນ 2ຄົນ ຕາຍຜູ້ໜຶ່ງເປັນຜູ້ຊາຍຢູ່ຕໍ່ມາກໍ່ປະຮ້າງກັນເຂົາເວົ້າວ່າ: ເມຍເກົ່າເພິ່ນໄປນຳຜູ້ບ່າວວ່າຊັ້ນ. ດຽວນີ້ລາວໄດ້ເອົາຜົວໃໝ່ແລ້ວ ເອົາພະນັກງານເມືອງຄືເກົ່າຫັ້ນລະ ປະຈຸບັນນີ້ຍັງມີຊີວິດຢູ່ ບາງເທື່ອໄປມາກໍ່ແວ່ຢູ່ ລຸງບຸນຕັ້ງໄປຫາລາວ ເພາະວ່າຄິດຮອດລູກສາວ. ເມຍກົກເພິ່ນລາວປະລຸງບຸນຕັ້ງໄດ້

3 ເດືອນ ຮອດປີ 1968 ລຸງບຸນຕັ້ງຈຶ່ງເອົາເມຍຜູ້ທີ 2 ຊື່ວ່ານາງໄກສອນເຊິ່ງແຕ່ງງານຢູ່ສະຫວັນນະເຂດ ຊົນເຜົ່າຜູ້ໄທ, ພວກເພິ່ນມີລູກນຳກັນ 9ຄົນ, ຊາຍ 5ຄົນ ແລະ ຍິງ 4ຄົນ, ສ່ວນລູກຊາຍກໍກນັ້ນມີຄອບຄົວແລ້ວ ລູກເພິ່ນໄດ້ເປັນພະນັກງານໝົດທຸກຄົນ ຜູ້ຍິງກໍ່ໄດ້ເອົາຜົວເກືອບໝົດແລ້ວ ຍັງແຕ່ລູກສາວຫຼ້າຂອງເພິ່ນຜູ້ດຽວ ລາວເປັນແພດທະຫານ.

ລຸງບຸນຕັ້ງວ່າ: "ດຽວນີ້ຂໍນັບຖືຮັກແພງພວກທ່ານ ທີ່ມາເກັບກຳຂໍ້ມູນປະຫວັດສາດຂອງຄອບຄົວຢູ່ທ້ອງຖິ່ນ, ຫຼືວ່າສ່ວນຕົວຂອງຂ້າພະເຈົ້າເອງ ອັນນີ້ຂ້າພະເຈົ້າ ຂໍຂອບອົກຂອບໃຈ ແລະດີໃຈນຳຫຼາຍແຕ່ເປັນໜ້າເສຍດາຍທີ່ອາຍຸຂອງຂ້ອຍແກ່ແລ້ວ ຫຼົງໆລືມໆ ຂໍອະໄພນຳທີ່ວ່າບໍ່ລະອຽດປານໃດ ເພາະວ່າອາຍຸການປະຕິວັດກໍ່ໄດ້ 43 ປີ ແລ້ວ. ໃນເມື່ອເປັນແນວນັ້ນແລ້ວອາດຈະບໍ່ຄົບຖ້ວນພຽງພໍ ຈື່ໄດ້ສ່ຳໃດແລ້ວຂ້ອຍກໍ່ເວົ້າສ່ຳນັ້ນ". ເພິ່ນເວົ້າວ່າ: ສາເຫດທີ່ພາໃຫ້ເພິ່ນໄປເປັນອິດສະຫຼະກໍ່ເພາະວ່າ ໃນເວລານັ້ນສະພາບຄອບຄົວເພິ່ນເປັນແນວນີ້! ສະພາບຍາດຕິພີ່ນ້ອງເພິ່ນກໍ່ເປັນແນວນີ້ຄືວ່າ: ກົກເຄົ້າເຫງົ້າກໍ່ພວກເພິ່ນນີ້ແມ່ນເຜົ່າຕະໂອ້ຍ ເວລານັ້ນມີ 16ພັນຄົນ 10 ຕາແສງ. ພວກເພິ່ນຊາວເຜົ່າຕະໂອ້ຍໃນສະໄໝນັ້ນ ແມ່ນທຸກຍາກທີ່ສຸດ ທັງນີ້ກໍ່ຍ້ອນການກົດຂີ່ຂູດຮີດຂອງພວກຈັກກະພັດຝຣັ່ງ, ຍ້ອນເພິ່ນເຫັນໄດ້ຄວາມທຸກຍາກຂອງປະຊາຊົນ ເກືອຊິກິນກໍ່ບໍ່ມີ, ເຄື່ອງຊິນຸ່ງຊິຖືກໍ່ຂາດເຂີນ ເຈົ້ານາຍກໍ່ກົດຂີ່ຂູດຮີດໜັກ. ດັ່ງນັ້ນ, ພໍ່ບຸນຕັ້ງ (ພໍ່ເພິ່ນເອງ) ຈຶ່ງໄດ້ຊອກຫາເສັ້ນທາງເພື່ອຈະແກ້ໄຂພໍ່ເພິ່ນໄດ້ເຮັດທຸກວິທີທາງ ເພື່ອຢາກປົດປ່ອຍອອກຈາກແອກກົດຂີ່ຂູດຮີດດັ່ງກ່າວ, ຊຶ່ງກ່ອນອື່ນໝົດແມ່ນເພິ່ນຕ້ອງໄປພົວພັນກັບສາຍພູຫຼວງ ຂຶ້ນໄປຮອດອົງແກ້ວພຸ້ນເພື່ອໄປປະຊຸມຢູ່ສາຍພູຫຼວງ. ເວລານັ້ນເພິ່ນໄປພົບອົງແກ້ວອົງກົມມະດຳ ປີ 1927 ແລະ ກໍ່ເລີຍປະຊຸມກັນ 7ວັນ ເພື່ອປຶກສາຫາລື ແລະ ວາງແຜນການ. ຫຼັງຈາກປະຊຸມແລ້ວ ພໍ່ເພິ່ນກໍ່ກັບເມືອງທ້ອງຖິ່ນ ເມືອຮອດເມືອງຕະໂອ້ຍ ແລ້ວພໍ່ເພິ່ນກໍ່ໄດ້ຊັກຊວນໃຫ້ປະຊາຊົນ ເປີດເສັ້ນທາງໃຫ້ປະຊາຊົນພໍ່ເພິ່ນຊັກຊວນໄດ້ທັງໝົດ 10ຕາແສງ ໄປໝົດທຸກບ່ອນ ເອົາເບີຂອງອົງແກ້ວ

ກິນມະດຳ ຢາຍໃຫ້ແຕ່ລະບ້ານ ແຕ່ລະເຮືອນໃນເວລານັ້ນມີທັງການເມືອງ ແລະ ມີທັງການທະຫານໄປພ້ອມໆກັນ ບ່ອນໃດຫາກບໍ່ມີແຮງການທະຫານ ເປັນຕົ້ນຕໍແມ່ນເອົາທາງການເມືອງເຂົ້າຄື: ພໍ່ເພິ່ນເຊີນຊວນເອົາບັນດາເຜົ່າຕ້ອງສາມັກຄີການຕໍ່ສູ້ ຕ້ານກັບທຸກຮູບແບບທຸກການຮຸກຮານຂອງຝຣັ່ງ. ຕໍ່ມຈຶ່ງເກີດເປັນການປະຕິວັດເປັນກຸ່ມໆ ແຕ່ຍັງບໍ່ທັນມີພັກນຳໃນເວລານັ້ນ ພໍ່ເພິ່ນຊັກຊວນເອົາໝົດເຜົ່າລາວເທິງ ຕ້ອງໄປນຳຂະບວນການຂອງພໍ່ເພິ່ນ ຕ້ອງເຮັດການປະຕິວັດ ຕ້ອງຕ້ານຝຣັ່ງສຸດຂີດ, ເປັນຕົ້ນໃນປີ 1927 ຈົນຮອດ ປີ 1928 ເພິ່ນໄດ້ອອກເຄື່ອນໄຫວຊັກຊວນຕໍ່ສູ້ທາງດ້ານການເມືອງຄື: ອັນທີໜຶ່ງແມ່ນບໍ່ຍອມໄປເປັນກຸລີ, ປິດບັງສະຖິຕິ ຈຳນວນພົນລະເມືອງບ້ານໃດມີຮອດ 300-400 ຄົນ ກໍ່ໃຫ້ລາຍງານແຕ່ 100 ຫາ 150 ຄົນທໍ່ນັ້ນ. ນອກຈາກນັ້ນພໍ່ເພິ່ນປິດລັບໝົດບໍ່ໃຫ້ຝຣັ່ງຮູ້ ບໍ່ໃຫ້ສຳມະໂນ ອັນນັ້ນແມ່ນວິທີໜຶ່ງທີ່ເຂົາຕໍ່ຕ້ານ, ວິທີທີສອງທີ່ເຂົາຕໍ່ສູ້ຄື ພໍ່ບຸນຕັ້ງນີ້ເປັນຜູ້ນຳພາປະຊາຊົນປັບປຸງປືນລູກອັດລູກແກັບປືນເພີງ ແລະໜ້າໜ້ອງຂວາກຫ້າວຕ່າງໆ [45] ພໍ່ເພິ່ນໄດ້ປຸກລະດົມກັນເຮັດໃຫ້ໝົດທຸກບ້ານທຸກບ່ອນໂດຍສະເພາະແມ່ນຂຸມຂວາກ ໃຫ້ເຮັດໝົດທຸກບ້ານພ້ອມກັນນັ້ນ ພໍ່ເພິ່ນລະດົມໃຜມີຫວ້ານກ້ານກາ ແລະ ຢາກ້ານກໍ່າກໍ່ໃຫ້ຖືໄປນຳບາດເວລາຂຶ້ນພູພົບນ້ຳລິນພວກລຸງບຸນຕັງ ໄປຫາໃສ່ນ້ຳລິນ ບາດຝຣັ່ງມາກິນນ້ຳລິນ ແລ້ວເຮັດໃຫ້ຝຣັ່ງນັ້ນເບື່ອຕາຍ [46] ສ່ວນທະຫານລາວ ພວກກິນມັງໂດມາກິນນ້ຳລິນນີ້ກໍ່ຕາຍຫຼາຍຄົນ. ສຸດທ້າຍພວກຝຣັ່ງກັບຄືນເມືອຄົ້ນຄວ້າໃໝ່ເພື່ອຫາຢາປ້ອງກັນຢາເບື່ອ ຊຶ່ງມີຢາຂອງມັນແດງໆ ແບບຢາສູບ ມັນມາຫາໃສ່ຝຣັ່ງບໍ່ໃຫ້ກິນນ້ຳລິນ. ຈຸທີ່ເຮັດໜ້າໃຫຍ່ໃສ່ໜ້ອງກໍ່ພາກັນໄປລັດຫຼອນຍິງມັນໂຕນີ້ລະເຮັດໃຫ້ມັນຢ້ານທີ່ສຸດ. ອັນທີສາມມາແມ່ນໃນເວລາມັນເກນເລື່ອງໄກ່ເລື່ອງໝູກໍ່ບໍ່ເສຍໃຫ້ມັນ ໃຫ້ເອົາໄກ່ໄປລີ້ງບ່ອນຄ້າຍນັ້ນ ປິດນີ້ກໍບໍ່ໄປ, ມັນ

---

[45] ໜ້ານ້ອງແລະຂວາກຫ້າວ ເປັນອາວຸດມູນເຊື້ອຂອງເຜົ່າໂມນຂະແມ ຢູ່ລາວເພື່ອປ້ອງກັນຕົວ, ລ່າສັດແລະຕີສັດຕູ

[46] ຫວ້ານຢາເບື່ອກໍ່ເປັນອາວຸດເຄມີ ທີ່ເປັນມູນເຊື້ອຂອງເຂົາເຈົ້າ ເພື່ອຂ້າຄົນທີ່ເປັນສັດຕູ.

ຢາກໄດ້ 10 ໂຕ ໃຫ້ແຕ່ໂຕໜຶ່ງ 2 ໂຕ; ເງິນເສຍຊ່ວຍກໍຄືກັນນັ້ນ ຢາກໄດ້ ນຳແຕ່ລະຄົນ (100 ຄົນ) ທີ່ມີບັນຊີຢູ່ນຳມັນກໍບໍ່ໃຫ້ເສຍ ໃຫ້ເວົ້າວ່າມີແຕ່ ເອີເອສາເຈີຍ ຂອງອິນດູຈີນ (ເງິນກີບສາມນາງຂອງອິນດູຈີນ) ມັນກໍ ບໍ່ເອົາ, ມັນຢາກໄດ້ແຕ່ເງິນກີບທີ່ວໜານເງິນຫຼຽນເກົ່າ, ອັນນີ້ເຂົາເຈົ້າກໍພາກັນ ຕໍ່ສູ້. ອັນທີ 4 ມາກໍແມ່ນໄປເອົາກູລີໄປຕາດໄຮບໍ່! ແກ້ງດາວບໍ່! ໄປທັບທີ່ນ ເຮັດທາງ ມັນຢາກໄດ້ 100 ຄົນ ພວກເຮົາກໍໄປແຕ່ 10 ຄົນ ເຊິ່ງທັງໝົດນີ້ ເອີ້ນວ່າຕໍ່ສູ້ ທາງການເມືອງ. ບາດນີ້ທາງດ້ານການທະຫານເຂົາເຈົ້າ ໄດ້ເຮັດ ໂທນ, ເຮັດຂວາກ ແລະ ເຮັດຫຼາວບາດສັດຕູກາຍມາເສັ້ນທາງໂຕນີ້ ແມ່ນຖືກ ຫຼາວຫຼ້າວຊັດໃສ່ໂລດ ເລາະຕາມທາງແຄມໄຮ່ແຄມນານີ້ເຂົາເຈົ້າໄດ້ກຽມໄວ້ ໝົດ ຊຶ່ງອັນນີ້ແມ່ນພໍ່ເພິ່ນ (ພໍ່ບຸນຕັງ) ເປັນຜູ້ຊັກຊວນ ແລະ ນຳພາເຮັດໂດຍ ກົງ. ອັນນັ້ນແມ່ນເວົ້າເລື່ອງການທະຫານກໍເປັນແນວນັ້ນລະ, ຍັງບໍ່ທັນຕີແຮງຕີ ແບບແປະໆບາງໆ, ແຕ່ຝຣັ່ງກໍຢ້ານແລ້ວ, ເວລານັ້ນມັນບໍ່ກ້າຂຶ້ນນຳອີກ ມັນ ພະຍາຍາມທີ່ສຸດທີ່ຈະເອົາເຜົ່າຕະໂອ້ຍ ແຕ່ກະເອົາບໍ່ໄດ້ ມັນກໍເປັນມາຄື ແນວ ນັ້ນລະ ສະພາບການເຄື່ອນໄຫວຕົວຈິງຕອນໄລຍະທີ່ບໍ່ທັນມີພັກນຳພາເມື່ອ ປີ 1927-1928. ໃນຂະນະດຽວກັນນັ້ນ ພວກຝຣັ່ງມັນຕ້ອງການຈັດຕັ້ງຕາແສງ ຂຶ້ນ ພວກລຸງບຸນຕັງກໍເລືອກເອົາຄົນໄປເປັນຕາແສງນຳມັນ ເອົາຄົນປະຕິວັດ ຂອງພວກລຸງບຸນຕັງໃຫ້ເປັນຕາແສງ, ມັນສຳຄັນແນວນັ້ນ ສະເພາະເຜົ່າຕະ ໂອ້ຍ ເຂົາເຮັດແນວນັ້ນໝົດ ຄັນບໍ່ແມ່ນຄົນປະຕິວັດບໍ່ໃຫ້ເປັນຕາແສງເດັດຂາດ ເຂົາ ເຈົ້າຈັດຕັ້ງແຕ່ຄົນປະຕິວັດ ຖືວ່າ 95% ແມ່ນຄົນພວກລຸງບຸນຕັງ ມີບາງ ເຂດຮອດ 100% ແມ່ນຄົນປະຕິວັດທັງໝົດ ໃຫ້ເປັນຕາແສງນຳມັນ ພວກ ເຮົາເຮັດການນຳມັນ, ແຕ່ເນື້ອແທ້ແມ່ນຄົນປະຕິວັດ. ອ້າຍສິນບຸນແທ້ໆ ເຜົ່າ ກະຕູ, ເຜົ່າຕະໂອ້ຍ, ເຜົ່າກະຕາງ ແລະ ເຈົ້າຂອງເມືອງຕະໂອ້ຍກໍແມ່ນເອົາ ບໍ່ໄດ້, ເອົາບໍ່ໄດ້ເພາະມັນຕັ້ງປົດຕັ້ງຄ້າຍຢູ່ຫັ້ນ ທະຫານເປັນກອງຮ້ອຍເປັນ ກອງພັນ ຖ້າຫາກມັນເອົາບໍ່ໄດ້ ໃຫ້ເຂົາເຈົ້າຕ້ານຄື ຜ່ານມານັ້ນຍາກທີ່ສຸດ ຈຳ ເປັນຕ້ອງໄດ້ສູ້ຕາມໃຈນັກແຕ່ມັນກໍບໍ່ໄດ້. ຕໍ່ມາພວກມັນສະເໜີວ່າເລື່ອນຊັ້ນຈັດ

ຕັ້ງອາຍາເພຍ ເຈົ້າກົກເຈົ້າເຫຼົ່າ ມັນຈັດຕັ້ງຂຶ້ນ ແລະມັນກໍ່ເລື່ອນຊັ້ນໃຫ້ມະຫາຊົນຫັ້ນ ມັນຊຸກຍູ້ໃຫ້ມະຫາຊົນໄປນຳມັນ ເຮັດໃຫ້ພວກນີ້ມີກຳລັງໃຈເຮັດຫັ້ນ. ເຖິງວ່າມັນຈັດຕັ້ງແນວໃດກໍ່ຕາມ ເຊື່ອແນ່ວ່າ ຄົນປະຕິວັດຍັງຢູ່ຫັ້ນ ມັນຈັດຕັ້ງແຮ່ງດີປະຊາຊົນວ່າ ມັນຈັດຕັ້ງອາຍາເພຍ ອາຍາມ່ອມ ກໍ່ຢ່າມັນແຕ່ຈິດໃຈພວກເພິ່ນບໍ່ໄປເຮັດນຳມັນ. ຕໍ່ມາຮອດປີ 1934 ຂະບວນການລຸກຮື້ຂຶ້ນຂອງຊາວຜູ້ອອກແຮງງານຖືວ່າ ເປັນຂະບວນການອັນ ແຂງແຮງອັນໜຶ່ງໃນຊົນເຜົ່າ. ຕໍ່ສະພາບການຄືແນວນັ້ນ ພວກມັນອອຍແນວ ນັ້ນແນວນີ້, ຈັດຕັ້ງໃຫ້ອາຍາເພຍ ອາຍາມ່ອມໄປໄກ່ເກ່ຍເຂົາເຈົ້າກໍ່ບໍ່ໄປ, ເລື່ອນຊັ້ນແນວໃດ່ເຂົາກໍ່ບໍ່ໄປ. ນັ້ນຖືວ່າແມ່ນຂະບວນການປະຕິວັດໄດ້ກຳເນີດເກີດຂຶ້ນຈົນຮອດປີ 1945 ກະໂຕລຸງບຸນຕັງເອງຕອນນັ້ນ ກໍ່ໄປພົວພັນກັບຫວຽດນາມ ໃນວັນທີ 25/12/1945. ລຸງບຸນຕັງອອກໄປເຮັດການປະຕິວັດ ເຫດຜົນກໍ່ເພາະວ່າ ໃນເວລານັ້ນສັງເກດຕີລາຄາເຫັນວ່າປະຊາຊົນທຸກຍາກຫຼາຍ, ຖືກບີບບັ້ທໍລະມານ, ຈັບເອົາຄົນລາວໄປເປັນກູລີ, ໄມ້ແສ້ຕີປະຊາຊົນ, ຝຣັ່ງຕີຄົນລາວ, ຄົນລາວຕີຝຣັ່ງອີກກະທືກຢູ່ຂົວຕາດໄຮແກ້ງດາວ [47] . ນີ້ ຄືດຽດແລ້ວ! ເຈົ້ານີ້ດູຖູກດູມິ່ນປະມາດຊາດລາວແທ້ໆ. ຈາກນັ້ນ ພວກມັນເອົາລຸງບຸນຕັງໄປເສຍພາສີ, ຂຶ້ນເລກໃໝ່, ເຂົ້າເລກຄືນໃໝ່ເພື່ອເອົາເພິ່ນໄປ ເຮັດກູລີມີຕົວເລກໜັງສືຈຶ່ງເຮັດກູລີໄດ້. ເຈົ້າສະບາຍໂລດບໍ່ແມ່ນເປັນຂີ້ຂ້ອຍ ຫົວເຈົ້າເພິ່ນຄິດໃນໃຈບໍ່ໆຈຶ່ງຕັດສິນໃຈໄປ ໄປລະເດີໄປຢູ່ກອງທັບອາ 3 ຫວຽດນາມ ຊຶ່ງໃນເວລານັ້ນເຂົາເອີ້ນວ່າກອງພັນໄຕຽນຂອງຫວຽດນາມ ແຂວງກວາງຈິ. ໄປຢູ່ຫັ້ນເພິ່ນໄດ້ໄປຈັດຕັ້ງ ຕັ້ງເມືອງສະໝ້ວຍ, ໄປກໍ່ສ້າງພື້ນຖານ ແລະ ຈັດຕັ້ງຕາແສງເມືອງສະໝ້ວຍ 3 ຕາແສງ, ຈາກນັ້ນກໍໄດ້ ໄປຈັດຕັ້ງຢູ່ເມືອງຕະໂອ້ຍອີກ ຊຶ່ງເວລານັ້ນເພິ່ນໄດ້ເວົ້າເປັນພາສາຕະໂອ້ຍ ເຂົາກໍ່ເຂົ້າໃຈນຳກັນ ໂດຍສະເພາະແມ່ນຕາແສງຝ່າຍຝຣັ່ງຫັ້ນລະໂຄສະນາຢ່າໄປນຳເຂົາ.

---

47 ຂົວຕາດໄຮແມ່ນລຸງສຸພານຸວົງເປັນຜູ້ສ້າງ, ພວກເຈົ້ານາຍຝຣັ່ງເກນເອົາກູລີໄປເຮັດການຢູ່ທີ່ນັ້ນ (ກູລີແປວ່າກຳມະກອນ)

ພໍດີເກີດສົງຄາມໂລກຄັ້ງທີ 2 ໃນປີ 1945 ພວກທະຫານຍີ່ປຸ່ນມາຮອດສາລະວັນ ແລ້ວພວກລຸງບຸນຕັງກໍ່ໄປນໍາຍີ່ປຸ່ນ ໄດ້ຍິນບໍມັນເວົ້າວ່າຝຣັ່ງໂກຍາໂຕ້ທັ້ນ ໃສ່ເກີບໂນໂລແກ້ງ, ໃສ່ໝວກເຫຼັກໄປນໍາຍີ່ປຸ່ນກໍ່ແມ່ນ ລຸງບຸນຕັງນີ້ລະໄປນໍາຍີ່ປຸ່ນ, ໄປຂ້າຝຣັ່ງຕາຍບັກໜຶ່ງ ແລະ ຈັບໄດ້ຝຣັ່ງແທ້ 3ບັກ. ສ່ວນຢູ່ບ້ານກໍ່ເຕັມໄປໝົດ, ແຕ່ເພິ່ນຂ້າຕາຍແທ້ໆອີກ 3 ບັກ ແລະ ຈັບໄດ້ຈ່ານວນໜຶ່ງ. ລຸງບຸນຕັງເຄື່ອນໄຫວຢູ່ນໍາພວກຍີ່ປຸ່ນທັ້ນ ປະມານໜຶ່ງເດືອນ ຈຶ່ງຖອນອອກຈາກທະຫານຍີ່ປຸ່ນ, ແລ້ວເພິ່ນໄປເປັນນັກສືບ, ແຕ່ບໍ່ແມ່ນເປັນທະຫານຍີ່ປຸ່ນ ພຽງແຕ່ວ່າຍີ່ປຸ່ນປະກອບສິ້ງເສື້ອ ແລະ ເກີບໃຫ້ຄືທະຫານ, ເອົາປືນບັກຍາວໆ ໃຫ້ເພິ່ນໄປຢູ່ນໍາກອງທັບຫວຽດນາມ, ໄປຢູ່ກະແຊນ, ຢູ່ກໍາໂລ, ດົງຫ່າ, ກວາງຈິ ເວລານັ້ນຖືວ່າກອງພັນໄຕຕຽນແມ່ນກອງທີ່ເຂັ້ມແຂງຮອບດ້ານ. ທ້າຍປີ 1946 ສໍາເລັດສົງຄາມໂລກຄັ້ງທີ 2 ແລ້ວທາງກອງທັບຫວຽດນາມໄດ້ສົ່ງລຸງບຸນຕັງ ເມືອສັງເກດສະພາບການຫວຽດນາມເວົ້າ: ຖ້າສະຫາຍຕາຍແມ່ນບໍ່ມີໃຜຮັບໃຊ້ໃນຊົນຊາດ, ຊົນເຜົ່ານີ້ແລ້ວ ເພາະວ່າພະນັກງານມັນມີໜ້ອຍຫາຍາກ ເພິ່ນຈຶ່ງໄດ້ໃຫ້ລຸງບຸນຕັງເມືອສ້າງພື້ນຖານ ໃຫ້ເພິ່ນຮັບຜິດຊອບໝົດເຂດພື້ນຖານ 4ຕົວເມືອງ. ຕົວເມືອງທີ່ເພິ່ນຮັບຜິດຊອບແມ່ນ: ເມືອງຕະໂອ້ຍ[48], ເມືອງນອງແຂວງສະຫວັນນະເຂດ, 3 ເມືອງຕຸ້ມລານ ແລະເມືອງກະລຶມຊຶ່ງໃນສະໄໝນັ້ນໄດ້ມີພັກອິນດູຈີນເກີດຂຶ້ນ (ປີ 1930) ມີພັກນໍາພາແຕ່ລຸງບຸນຕັງບໍ່ທັນເປັນສະມະຊິກພັກອິນດູຈີນເທື່ອ ພຽງແຕ່ເປັນພື້ນຖານໃຫ້ສະມະຊິກພັກອິນດູຈີນເທົ່ານັ້ນ. ບາດນີ້ລຸງບຸນຕັງນໍາພາເອົາໃຈໃສ່ແມ່ນບັນດາຕົວເມືອງເປັນຕົ້ນຕໍ. ເວລານັ້ນຝຣັ່ງມັນຕັ້ງປົດ 6 ປົດແຕ່ລຸງບຸນຕັງບໍ່ທັນຕ້ອງການປົດ, ເພິ່ນກໍາພື້ນຖານ, ເພິ່ນສ້າງບ້ານເຂດທີ່ໝັ້ນ ແລະສ້າງຈິດໃຈປະ

48 ຢູ່ເມືອງຕະໂອ໊ຍ ມີແຕ່ເຜົ່າຕະໂອ໊ຍ 100 % ຢູ່ເມືອງນອງມີແຕ່ເຜົ່າຜູ້ໄທ ສອງບ້ານ, ນອກນັ້ນແມ່ນເຜົ່າກະຕ່າງ, ຕະໂອ໊ຍແລະຕຣີ; ຢູ່ເມືອງຕຸ່ມລານມີເຜົ່າລາວລຸ່ມໜ້ອຍ, ນອກນັ້ນ 90 % ແມ່ນເຜົ່າກະຕ່າງ; ຢູ່ເມືອງກະລຶມມີເຜົ່າກະຕູ່ແລະເຜົ່າແງະ 100 % ບັນດາເຜົ່າດັ່ງກ່າວຮີດຄອງແລະພາສາປາກເວົ້າຄ້າຍຄືກັນ.

ຊາຊົນຕ້ອງໄປນຳເພິ່ນໝົດໄດ້ 10 ຄົນ 200 ຄົນ ກໍ່ຕ້ອງໄປນຳເພິ່ນ, ເພິ່ນສ້າງໄປບ້ານນັ້ນໄປຕຳບົນນີ້ ຈົນໝົດເຂດນັ້ນ. ຫຼັງຈາກລຸງບຸນຕັງໄດ້ໝົດແລ້ວ ປະຊາຊົນເມືອງຕະໂອ້ຍ 95%, ແລ້ວເພິ່ນໄດ້ພື້ນຖານ ເພິ່ນຈຶ່ງຫັນໃສ່ເລື່ອງການທະຫານ ບາດນີ້ເພິ່ນຈຶ່ງຕີທາງດ້ານການທະຫານ, ແຕ່ພວກອ້າຍນ້ອງເພິ່ນກໍ່ຂັດຂ້ອງວ່າບໍ່ມີປືນ, ປືນກໍ່ 2-3 ບອກ, ບໍ່ມີປືນເພິ່ນວ່າບໍ່ຍາກປືນຢູ່ນຳຝຣັ່ງພຸ້ນ, ເພິ່ນເວົ້າວ່າ: "ເອົາປືນຝຣັ່ງຍິງຝຣັ່ງ, ບໍ່ຍາກຄະແນນໝູ່ເຈົ້າໄປນຳຂ້ອຍ". ເວລານັ້ນເພິ່ນຈັດຕັ້ງກຳລັງທະຫານໄດ້ 45 ຄົນ ລະດົມໝົດຊາຍໜຸ່ມຜູ້ດີທີ່ເພິ່ນເລືອກໝົດໄດ້ແລ້ວ ແມ່ນເລີ່ມຕົ້ນຕີທາງການທະຫານ ເມື່ອພື້ນຖານການທະຫານເຂັ້ມແຂງ ແລະ ແໜ້ນໜາແລ້ວ ປະຊາຊົນກໍ່ບອກໄດ້ໃຊ້ຟັງ. ລຸງບຸນຕັງບອກປະຊາຊົນວ່າ: ຄັນເວລາຝຣັ່ງໄປຖາມຫາພວກປະຕິວັດ ກໍ່ໃຫ້ບອກມັນໄປວ່າ: "ບໍ່ຮູ້ບໍ່ຈັກບໍ່ເຫັນໃຫ້ປະຕິບັດ 3 ບໍ່ ໃຜກໍ່ຕາມແຕ່ລະບ້ານໃຫ້ຕອບແນວນັ້ນໝົດ". ບາດນີ້ແລ້ວ ພວກລຸງບຸນຕັງກໍເລີ່ມຕົ້ນຕີ, ຕີຊຸດທີນຶ່ງເພິ່ນໄດ້ປືນ 1 ກະບອກ, ຕີບາດ 2 ເພິ່ນໄດ້ປືນ 15 ກະບອກ, ຕີບາດ 3 ເພິ່ນໄດ້ປືນ 30ກະບອກ, ເພິ່ນໄດ້ປືນຫຼາຍຂຶ້ນ, ຫຼາຍຂຶ້ນໄດ້ເທື່ອໃດກໍ່ປະກອບໃຫ້ທະຫານເພິ່ນຈົນຄົບ, ເຫຼືອນັ້ນຈຶ່ງປະກອບໃຫ້ກອງຫຼອນ. ໃນໄລຍະນັ້ນກອງຫຼອນໄດ້ 150 ຄົນ ເປັນກຳລັງປະຈຳພື້ນທີ່ຂອງເພິ່ນ, ເພິ່ນທັງເອົາປືນຂອງຝຣັ່ງໄປຢາຍໃຫ້ພ້ອມທັງເວົ້າວ່າ: ມີແຕ່ປົດປ່ອຍຝຣັ່ງເທົ່ານັ້ນ ພວກເຮົາຈຶ່ງຈະມີສິ້ງເສື້ອນຸ່ງ. ຖືວ່າພວກເພິ່ນປົດປ່ອຍຝຣັ່ງຢູ່ 6ປົດຄື: ປົດເມືອງນອງມີຝຣັ່ງ 8 ຄົນ ແລະ ທະຫານຂອງພວກກອງຮ້ອຍໜຶ່ງ. ພວກເພິ່ນຕີຢູ່ຫັ້ນບໍ່ຮູ້ວ່າຈັກໃຜຕາຍໃຜຍັງ ເພິ່ນເຂົ້າໃນເຮືອນເພິ່ນຍິງໝົດ 12 ໂມງກາງຄືນເພິ່ນເບິ່ງຝຣັ່ງມັນນອນ ແລະ ເພິ່ນສັ່ງເອົາໂລດຍິງໂລດ, ຍິງເລີຍທະຫານຝຣັ່ງ, ຝຣັ່ງຕາຍກອງຢູ່ຫັ້ນ; ເພິ່ນໄດ້ປືນຢູ່ເມືອງນອງ 27 ກະບອກ ໄດ້ເງິນຫຼຽນໃໝ່ຫຼຽນເກົ່າແກັດໜຶ່ງ ພາກັນຫາມມາເອົາສິ້ງເສື້ອຢູ່ຫັ້ນເບີກໃຫ້ອ້າຍນ້ອງທະຫານເພິ່ນ, ພວກທີ່ບໍ່ມີສິ້ງເສື້ອ ໝາຍຄວາມວ່າເພິ່ງຕົນເອງກຸ້ມຕົນເອງປືນກໍ່ຫາເອົານຳຝຣັ່ງ, ເງິນກໍຫາເອົານຳຝຣັ່ງ, ສິ້ງເສື້ອກໍຫາເອົານຳຝຣັ່ງ ກຸ້ມ

ຕີນເອງບໍ່ມີໃຜເບີກ. ຈາກນັ້ນພວກເພິ່ນກໍ່ຕີປິດລະວີ (ປິດລະວີປອງ) ຕີປິດຕະລຸງຊຶ່ງດຽວນີ້ແມ່ນສຳນັກເມືອງ, ຕີປິດຕຳລິນີ້ແມ່ນດັບສູນຝຣັ່ງໄດ້ 12 ຄົນ, ທະຫານຝຣັ່ງຕາຍກັບບ່ອນປະມານ 70 ຄົນ. ໃນເວລານັ້ນກອງຮ້ອຍຂອງລຸງຕັງເກືອບເຕັມຮ້ອຍແລ້ວ, ທັງຕີທັງຂົນຂວາຍເອົາຊະເລີຍ, ໄດ້ບິດຮຽນຕົວຈິງໄປນຳ. ພວກເພິ່ນມີກອງຮ້ອຍໜຶ່ງຕີປິດຕ່ຳລີ ທັງບ້ານຕຳລີໃຫຍ່ ແລະ ຕຳລີເກົ່າ ດັບສູນຢູ່ຫັ້ນຢ່າງລາບຄາບ ໃນປີ 1946 ແລະ ໄດ້ໄຊຊະນະ. ໃນການຕີເທື່ອນີ້ຂອງເພິ່ນ ກໍມີເພື່ອນມິດອາສະໝັກຫວຽດນາມ 10 ຄົນ ໄປນຳເພິ່ນ, ພວກເພິ່ນບໍ່ມີປືນໃຫຍ່ມີແຕ່ປືນນ້ອຍປືນເຫຼັກຍາວຕີປິດລະວີ ໄປແຕ່ 3 ຊຸດ ຕໍ່ມາເພິ່ນຕີປິດລະບອງກໍ່ແຕກ, ຕີປິດຕະລຸງກໍແຕກ ພວກຝຣັ່ງ ແລະ ທະຫານພວກມັນແຖວນັ້ນແຕກໝົດ [49] . ສະຫຼຸບສັງລວມແລ້ວໃນໄລຍະຕີສົງຄາມໂຕນີ້ຫັ້ນຖືວ່າ ລຸງບຸນຕັງຍຶດໄດ້ປືນ 180 ກະບອກ ມີທັງໝົດ ປືນພົກ ແລະ ປືນກົນຈັກ. ເມື່ອເພິ່ນໄດ້ປືນຫຼາຍ ເພິ່ນກໍ່ມີກຳລັງເຂັ້ມແຂງຂຶ້ນ ເພາະວ່າມີປືນ ແລະ ຈັກປືນກົນພ້ອມນັ້ນເພິ່ນຂໍໝາກບົມໃຫຍ່ຈາກຫວຽດນາມ ເພິ່ນວ່າຊຽວຊານເອີຍຂໍແດ່, ເຂົາກໍ່ຊ່ວຍໝາກບົມຊຳນີ້ ຊຳນີ້ມີໝາກບົມນ້ອຍ, ໝາກບົມໃຫຍ່ ແລະ ໝາກບົມປານກາງ. ຕໍ່ມາພວກລຸງບຸນຕັງກໍໄປລັດຍິງສະກັດພວກມັນມາແຕ່ຫວຽດນາມ, ມັນແຕ່ກະແຊັນເພື່ອເຂົ້າຕະໂອ້ຍ, ພວກເພິ່ນຕີຢູ່ຫັ້ນຢ່າງດຸເດືອດບໍ່ໄດ້ຂາດ ມາເທື່ອໃດຕີເທື່ອນັ້ນມັນມາເປັນກອງພັນໜຶ່ງລາວກໍ່ຕີ, ມັນມາກອງຮ້ອຍໜຶ່ງເພິ່ນກໍ່ຕີ, ມັນມາ 5 ຄົນ 10 ຄົນ ເພິ່ນກໍຕີ ແລະ ຫຼອນຕີຢູ່ຈັ່ງຊັ້ນ. ພວກມັນຕາຍເທື່ອລະ 3-4 ບັກ, ແຕ່ວ່າກຳລັງຂອງພວກລຸງບຸນຕັງປອດໄພໝົດ, ຂອງແນວວ່າພວກເພິ່ນລັດຕີໄວ ຕີແບບສາຍຟ້າແມບ 5 ນາທີ ໃຫ້ແລ້ວ. ສົມມຸດວ່າເພິ່ນຍິງຢູ່ຫັ້ນແລ້ວ ໝາກບົມໃຫຍ່ເພິ່ນບິ່ມລົງ ບິ່ມລົງກໍໝົດເລື້ອງ, ແລ້ວພວກເພິ່ນກໍຍ້າຍໄປສະກັດລັດພວກມັນມາແຕ່ສະຫວັນນະເຂດ ທັງເຈມກາຍຈຸຈອນດັບສູນຢູ່ຫັ້ນມີທະຫານຝຣັ່ງ 4 ຄົນ ລາວອີກ 6 ຄົນ ຖືກຂວາກເພິ່ນອີກ ຖືກຂຸມຂວາກຂອດນີ້ຂອດນັ້ນບໍ່ອິດ. ຫຼັງຈາກນັ້ນແລະ

---

49 ທະຫານສັດຕູຢູ່ບັນດາປິດເລົ່ານັ້ນ ແມ່ນຢູ່ເມືອງຕະໂອ້ຍ ຕີແຕກໝົດ.

ເພິ່ນກໍ່ພາທະຫານມາຕີເຂດໃຈກາງເມືອງຕະໂອ້ຍ ແລະ ກໍ່ໄດ້ສະກັດຫຼາຍບ່ອນຖືວ່າເພິ່ນສະກັດ 20 ຄັ້ງ ລວມທັງໝົດຝຣັ່ງມັນຕາຍຢູ່ເມືອງຕະໂອ້ຍ 21 ຄົນ ແລະ ຈັບໄດ້ 3 ຄົນ, ມີໝໍໜຶ່ງບໍ່ຢາກຍ່າງເພິ່ນໃຫ້ມັນຍ່າງ ກໍບໍ່ຍອມຍ່າງ ເພິ່ນບອກວ່າ: ເອົາເກີບມໍລະແກ້ງເຈົ້ານີ້ໃສ່ ເກີບກໍ່ບໍ່ໃສ່ໄປກໍ່ບໍ່ໄປ ເພິ່ນເວົ້າໃຫ້ມັນວ່າ: "ຮ້ວາຍຂ້ອຍຍິງຖິ້ມໃດ່" ແລ້ວມັນຈຶ່ງຍອມຍ່າງ ຢ້ານລຸງບຸນຕັ້ງຝຣັ່ງຢ້ານຕາຍໂດຍໆຍອມໄປ, ຄັນບໍ່ໄປໄມ້ແສ້ລຸງບຸນຕັ້ງໃສ່ບໍ່ແມ່ນງ່າຍເຮັດຈັດແທ້ໆ. ເອີເພິ່ນເວົ້າບໍ່ທັນໝົດ ມີເທື່ອໜຶ່ງເພິ່ນຕີປິດປະຈຸບໍ່ແຕກ, ເພິ່ນຕີບໍ່ແຕກກໍ່ເພາະວ່າ ທະຫານຝຣັ່ງກອງຮ້ອຍໜຶ່ງຕໍ່ພວກເພິ່ນ 6 ຄົນເລີຍຕີບໍ່ແຕກ. ພວກລຸງບຸນຕັ້ງມີປືນສະຕ໊ອກຍິງຊັດໃສ່ບໍ່ແຕກ ບໍ່ແຕກແລ້ວພວກເພິ່ນກໍ່ຖອຍ, ຖອຍໄປສະກັດຕີຢູ່ກາງທາງອີກ. ຕອນນັ້ນລຸງບຸນຕັ້ງຖືກເຈັບ, ຕອນນັ້ນຝຣັ່ງຍິງປືນດັກໃສ່ 2 ບອກ ຍິງກັນຊື່ງໜ້າ ປະມານ 20 ແມັດ ນີ້ລະປືນເຫຼັກຍາວທັ້ນເຂົາເອີ້ນວ່າປືນອີ່ສັງມີລູກ 50 ລູກທັ້ນ, ຝຣັ່ງມັນຍິງພໍດີເພິ່ນຖືກບາດເຈັບ. ກໍ່ຊິຖືກເພິ່ນພັດປິ່ນກົ້ນໃຫ້ມັນ, ເພິ່ນພັດເຊື່ອສັງຄົນງົມງວາຍແດ່ "ຍິງມາໂລດບໍ່ຖືກດອກເພິ່ນວ່າ". ປືນຈັກມັນໄຫຼໃສ່ຕາດໆ ພ້ອມທັງເວົ້າວ່າ: "ຈັບອິດສະຫຼະນ້ອຍກ່ອນ ເຢັດແມ່ມັນ". ເຮັດໃຫ້ໝູ່ລຸງບຸນຕັ້ງ 6 ຄົນ ຍິງເກືອບໝົດລູກປືນ, ຍ້ອນພວກລຸງບຸນຕັ້ງຂ້າມັນຢູ່ກັບບ່ອນນັ້ນ 5 ຄົນ ຍິງໃສ່ກະດານທົວມັນພວກເຫຼັກມັນກໍ່ບໍ່ຢູ່, ຢອກບໍ່ກັບປືນຂອງຍີ່ປຸ່ນ (ກະໂຕເນຍຍີ່ປຸ່ນ). ປືນຍີ່ປຸ່ນລູກນ້ອຍອີ່ຫຼີແນໃສ່ທະຫານຝຣັ່ງ 4-5 ຄົນຕາຍ. ແລ້ວຫວິດທັ້ນ ລຸງບຸນຕັ້ງກໍ່ຄາງອີກຮື້ໆໆ, ເພິ່ນຢາກໃຫ້ມັນນໍາເຂົ້າມາຫາເພິ່ນເດ, ມັນຮູ້ຈັກວ່າລຸງບຸນຕັ້ງລົ້ມຖືກເຈັບ, ລຸງບຸນຕັ້ງໃຫ້ມັນເຂົ້າມາ ລຸງບຸນຕັ້ງແນມເບິ່ງມັນມາອີກເພືອບໆ, ຕະບຸມບອນອາລີໄຊແລ່ນເຂົ້າມາ ລຸງບຸນຕັ້ງກໍກຽມຍິງອີກ ໝໍນີ້ຕາຍອີກໝໍນີ້, ລຸງບຸນຕັ້ງເວົ້າມາເຂົ້າມາມຶງຊິເກັ່ງສໍ່າໃດ! ມາໜີ້ມາໜີ້! ມັນບໍ່ຫານມາອີກແລ້ວ, ມັນບໍ່ກ້າເຂົ້າມາ ລຸງບຸນຕັ້ງກໍຍ່າງໄປຫາປະຊາຊົນທາມ, ເຂົາຫາມໂຕລຸງບຸນຕັ້ງສິ່ງເຂົ້າບ້ານໄປຫານາຍໝໍ. ນາຍໝໍກໍ່ບໍ່ມີຢາໃຫ້, ຢາກິນກ້ອນໜຶ່ງກໍ່ບໍ່ມີ, ເຂົາຫາມຍາກໃນເວລານັ້ນບໍ່ແມ່ນຄ່ອຍລໍາບາກຫຼາຍ, ອາ

ໃສແຕ່ໝໍມົນເປົ່າ. ນາຍມໍປົວລຸງບຸນຕັ່ງຕອນນັ້ນແມ່ນຄົນລາວເທິງ. ຕອນລາວເປົ່າຂາລຸງບຸນຕັ່ງຫັກໄດ້ 7 ວັນ ຈອດລຸງບຸນຕັ່ງຍ່າງໄດ້ເສີຍຖືວ່າເກັ່ງໃດເຖົ້ານີ້ເອີ[50], ຂາລຸງບຸນຕັ່ງດີແມ່ນເທົ່າດຽວນັ້ນລະ, ລາວຄົນອາຍຸປະມານ 60 ປີ ນີ້ລະ[51], ທຳອິດລາວວ່າ: ໂອ້ຍລູກຂ້ອຍຕາຍ, ລຸງບຸນຕັ່ງຕອບວ່າ: ໂອ້ຍບໍ່ຕາຍ! ບໍ່ຕາຍແມ່ເອີຍ, ລຸງບຸນຕັ່ງເຈົ້າເປົ່າໃຫ້ເລືອດເປື້ອນນີ້ອອກ, ເຈົ້າກັ່ນເລືອດໃຫ້ມັນອອກ, ເປົ່າກັ່ນອອກ ແລ້ວກໍດີເອງດອກ. ລຸງບຸນຕັ່ງຄຶດຄຽດແຄ້ນແຮງນອນກໍບໍ່ຫຼັບ ພ້ອມທັງຈີ່ມຢູ່ຜູ້ດຽວວ່າ: "ພໍດີເຢັດແມ່ມັນບັກຝຣັ່ງນີ້ ມຶງເດີ້ມື້ອື່ນເດີ ມຶງຕ້ອງຕາຍ". ລຸງບຸນຕັ່ງຄິດໄດ້ແນວນັ້ນ ຍັງບໍທັນດີປານໃດ ເພິ່ນກໍເລີຍຊວນໝູ່ 6 ຄົນ ໄປຕີມັນ, ພວກເພິ່ນໄປຍົວະຝຣັ່ງໃຫ້ມັນອອກຈາກປິດປະຈຸ, ແຕ່ມັນກໍ່ບໍ່ຍອມອອກແລ້ວ ພວກເພິ່ນບອກອ້າຍຕາແສງໄປຍົວະ. ຕາແສງມັນແຕ່ວ່າຄົນລຸງບຸນຕັ່ງ. ລຸງບຸນຕັ່ງບອກລາວວ່າເຈົ້າໄປຍົວະໃຫ້ມັນອອກມາເດີແລ້ວຝຣັ່ງມັນກໍ່ອອກມາ 60 ຄົນ. ທຳອິດທະຫານຝຣັ່ງ 3 ຄົນ ອອກມາກ່ອນ, ພໍແຕ່ອອກມາ ລຸງບຸນຕັ່ງກໍ່ຫິ້ນໝາກບົມໃຫຍ່ໃສ່, ໝາກບົມໃຫຍ່ໃສ່ອີກ, ໝາກບົມມັນສໍານີ້ເປັນ 20-30 ໜ່ວຍເກາະໂລດ ບຳບັ້ງ ບຳງໆງ ອາວມັນລົ້ມຢູ່ທັ້ນຖືກຂວາກຖືກຫ້າວ, ຕອນນັ້ນມັນຖືກຂວາກປະມານ 10 ຄົນ ຊອດສິ້ງເສື້ອກໍ່ຊອດລຸງບຸນຕັ່ງຊຸດສັບປະລີຂອງຝຣັ່ງ, ແລ້ວລຸງບຸນຕັ່ງກໍໄດ້ປືນອີກ 2 ກະບອກສະກັດຢູ່ທາງນີ້ 65 ນາທີເດ, ແຕກຕື່ນສຽງປືນແລ້ວ ພວກລຸງບຸນຕັ່ງຕີໄປເລີຍ ຢຽບມັນເລີຍ, ພວກລຸງບຸນຕັ່ງ ມີແຕ່ 6 ຄົນ.ຕົກມາໃນປີ 1954 ກໍາລັງປະເທດລາວຂຶ້ນ 2 ແຂວງ ເຕົ້າໂຮມບາດນີ້, ສ່ວນລຸງບຸນຕັ່ງກໍ່ໄດ້ເຕົ້າລວມເອົາໝົດທະຫານຕຸ້ມລານເມືອງຕຸ້ມລານ, ເຜົ່າກະຕາມທະຫານເມືອງນອງ ເຜົ່າມະກອງ ທະຫານກະລືມ ແລະເຜົ່າກະຕູ່ ທະຫານຕະໂອ້ຍ ຈັດຕັ້ງໄດ້ 180 ຄົນ ລຸງຕັ່ງບັນຊາກອງຮ້ອຍ, ລຸງສີພອນເລື່ອນຊັ້ນໃຫ້ລຸງຕັ່ງເປັນ

---

50 ແຕ່ກີ້ຢູ່ເຂດເຜົ່າຕະໂອ້ຍແລະບ່ອນອື່ນໆ,ເມື່ອຖືກບາດເຈັບຂາຫັກແຂນຫັກແລະອື່ນໆເຂົາເຈົ້າໃຫ້ໝໍມົນເປົ່າແມ່ນດີ,ແຕ່ຕ້ອງໄດ້ຄະລຳກິນບາງຊະນິດອາການ.

51 ໝໍມົນແມ່ນແມ່ຍິງແລະເປັນຄົນເຜົ່າຕະໂອ້ຍ

ຫົວໜ້າກອງຮ້ອຍ, ກອງຮ້ອຍເອກກະລາດ. ລຸງສີພອນບອກລຸງບຸນຕັ້ງ ວ່າ: "ເຈົ້າຮ້ອຍເອກເດີຮັບຜິດຊອບ180ຄົນໃຫ້ຢູ່ໃນການດູແລຂອງເຈົ້າ". ອ້າຍສີພອນ ປາລີຂັນ ຂອງລາວມາພີ້ເດ, ທ້າຍປີ 51-52 ລຸງສີພອນມາຕະໂອ້ຍກໍ່ພໍດີຢຸດຮົບ. ລຸງບຸນຕັ້ງຈັດຕັ້ງກຳລັງນີ້, ພວກເພິ່ນເດີນທາງເມືອຮອດ ຊຳເໜືອ 3 ເດືອນ ຍ່າງຕີນເປົ່າ, ບໍ່ມີລົດບໍ່ມີລາງຫຸກຍາກສິ່ງເສື້ອຊີ່ນຸ່ງກໍບໍ່ມີ, ມີແຕ່ເກືອກັບເຂົ້າກິນເທົ່ານັ້ນ, ໄດ້ອົດທົນ, ເພິ່ນລະດົມອ້າຍນ້ອງສຸດຂີດ. ພວກເພິ່ນຜ່ານຫວຽດນາມຈົນຮອດຊຳເໜືອ, ເມື່ອຮອດຊຳເໜືອພວກເພິ່ນຈັດຕັ້ງກອງພັນ 605 (ຫົກຮ້ອຍຫ້າ)[52] ເມືອງພູນຊຳເໜືອ ແຂວງຫົວພັນ. ແລ້ວລຸງບຸນຕັ້ງ ຢູ່ໃນກອງຮ້ອຍທີ2 ຂອງຫົກຮ້ອຍຫ້າ. ບາດນີ້ລະເພິ່ນໄດ້ຟັງຄວາມເຫັນຂອງທ່ານ ໄກສອນວ່າ: "ຕັ້ງເອີຍຕັດສິນໃຈປັບປຸງປ້ອງກັນ 2 ແຂວງເດີ[53]! ເຈົ້າຕ້ອງເປັນແບບຢ່າງ! ອາວກໍ່ເປັນຄົນສາລະວັນ ເພິ່ນວ່າເຈົ້າຕ້ອງເອົາກຽດຄົນສາລະວັນໄວ້ ເພິ່ນວ່າ". ພໍດີໃນເວລານັ້ນມີທະຫານທາງ ວຽງຈັນມາ 12 ກອງພັນ ໄປບຸກ 2 ແຂວງ ບໍ່ແມ່ນຂອງງ່າຍ, ຄືພວກເຮົາຮູ້ທັ້ນລະ, ຕີນາເກດ, ຕີຢູ່ພູລິວ ທ່ານ ສີສະຫວາດ ບັນຊາຢູ່ນາຊະລາ, ຢູ່ພູຈີຊວາງນັ້ນແມ່ນທ່ານຄຳໄຕເປັນຜູ້ບັນຊາ, ລຸງບຸນຕັ້ງເດປ້ອງກັນກຳສຳຄັນ, ຕອນນັ້ນລຸງບຸນຕັ້ງມີປືນໃຫຍ່ 150 ມໍມໍ, ເດກາ 57, ປະຊູເຈຍ, ບາໂຊ 90 ແລະ 81 ມໍມໍ ສີ່ກະບອກ, ກອງພັນຂອງພວກລຸງບຸນຕັ້ງຢູ່ທັ້ນ ຮົບໄປຮົບມາບໍ່ແມ່ນງ່າຍ, ພວກລຸງບຸນຕັ້ງ ດີກນາເກງກໍ່ແຕກ, ຕີດີກນາຊະລາກໍ່ແຕກ, ຕີພູຈີຊວາງອີກກັບຈຸທ່ານຄຳໄຕ. ຕີໄປຕີມາ ພວກລຸງບຸນຕັ້ງກໍ່ກັບໄປປ້ອງກັນຫ້ວຍເທົ້າ ອີກພວກສະຫາຍຂອງລຸງບຸນຕັ້ງຂໍຕີປິດຫ້ວຍເທົ້າ. ລຸງບຸນຕັ້ງໄດ້ລາຍງານໃຫ້ທ່ານໄກສອນເວລານັ້ນລຸງບຸນຕັ້ງວ່າ: "ຂ້ອຍຂໍຕີປິດຫ້ວຍເທົ້າໃນ ມື້ນີ້ລະບໍ່ມີວຽກມີງານອີ່ສັງ, ມີແຕ່ກອງຮ້ອຍດຽວຂອງນ້ອງນີ້ກໍ່ຂໍຕີ, ເມື່ອຍແລ້ວຢູ່ນີ້ປີໜຶ່ງແລ້ວ,

---

[52] ກອງພັນ 605 ແມ່ນກອງພັນຂອງພໍ່ເຖົ້າຕັ້ງສ່ວນໃຫຍ່, ສ່ວນຫຼາຍແມ່ນຊົນຊາດລາວເທິງ

[53] ເວລາຢູ່ເຕົ້າໂຮມ ສອງແຂວງ, ທ່ານ ໄກສອນ ພົມວິຫານ ລັດຖະມົນຕີ ກະຊວງປ້ອງກັນຊາດ ຂອງລັດຖະບານລາວຕໍ່ຕ້ານ.

ຢູ່ໄປເຮັດອີ່ສັງຕາຍທຸກຕາຍຍາກແທ້ໆ". ທ່ານໄກສອນພັດເວົ້າວ່າ: "ເອີບໍ່ໄດ້ຕັ້ງເອີຍ [54] ຄະນະສາກິນຢູ່ຫ້ວຍເທົ້າເພິ່ນບໍ່ໃຫ້ຕີ" ເວລານັ້ນທ່ານເຂັມຄອນບໍ່ໃຫ້ເພິ່ນຕີ. ພວກລຸງຕັ້ງຈິ່ມເມື່ອຍຢູ່ກິນແຕ່ໜໍ່ຈ້ານີ້ລະ. ຕອນນັ້ນພວກລຸງຕັ້ງກຽມໄວ້ໝົດແລ້ວ, ພວກເພິ່ນພາກັນຂຸດຂຸມໃຕ້ດິນເອົາ ປືນໃຫຍ່ເຂົ້າທາງໃຕ້ດິນ, ກະວ່າຊິຕີປົດນີ້ ໃຫ້ແຕກຕ້ອງດັບໃຫ້ໄດ້, ລຸງບຸນຕັ້ງຄັດເລືອກເອົາແຕ່ລະຈຸແຕ່ລະໜ່ວຍ ແຕ່ລະບ່ອນແລ້ວເພິ່ນຈັດຕັ້ງເອົາ 30 ຄົນ, ຕີເລີຍອ້າຍນ້ອງເພິ່ນກໍເມື່ອຍອິດແລ້ວເດ. ເວລານັ້ນລຸງບຸນຕັ້ງເວົ້າຕື່ມອີກວ່າ: "ອ້າຍບໍ່ຊ່ວຍຂ້ອຍກໍ່ໄດ້ ຂັ້ນເທິງບໍ່ຊ່ວຍຂ້ອຍກໍ່ໄດ້ຂ້ອຍຊິຕີເອງ". ແຕ່ໃນຕອນນັ້ນ ລະບຽບເຂັ້ມງວດທີ່ສຸດ, ລະບຽບຂອງກອງຮ້ອຍ ວ່າໜຶ່ງບໍ່ມີສອງອີກສັ່ງຕີກໍ່ຕີໂລດແຕ່ ທ່ານໄກສອນ ພັດວ່າຈັ່ງຊັ້ນລະພາກັນເຊົາສາ, ລຸງບຸນຕັ້ງວ່າ ໂອ້ຍ! ອຸການຳຜູ້ນີ້ເດ. ເພາະທ່ານໄກສອນ ກຳກະຊວງປ້ອງກັນຊາດ, ປ້ອງກັນປະເທດກໍ່ແມ່ນເພິ່ນ, ສະຖາບັນກໍ່ແມ່ນເພິ່ນ. ແຕ່ເພິ່ນພັດເວົ້າແບບນັ້ນ ພວກລຸງບຸນຕັ້ງກໍ່ໄດ້ເຊົາສະ, ສຸດທ້າຍກໍ່ແມ່ນລວມລາວ ໃນປີ 1957 ເລີຍບໍ່ໄດ້ຕີ, ລວມເຂົ້າມາເປັນອ້າຍເປັນນ້ອງ ພັກແພງຜູກພັນກັນຢູ່ນຳກັນ ກັບຈຸທ່ານສຸພົນ ແລະ ທ່ານສຸທັດ, ພວກລຸງບຸນຕັ້ງຍັງໄດ້ເວົ້າຢອກທະຫານວຽງຈັນວ່າ: "ດີແລ້ວໝູ່ເຈົ້າບໍ່ຕາຍ, ພວກຂ້ອຍຂໍຕີໝູ່ເຈົ້າເພິ່ນບໍ່ອະນຸຍາດຊື່ໆ". ຕອນລວມລາວຫັ້ນ ພໍດີລຸງບຸນຕັ້ງກໍ່ໄດ້ເຂົ້າເປັນສຳມະຊິກພັກປະຊາຊົນປະຕິວັດລາວ ໃນປີ 1957, ເພິ່ນເຂົ້າແລ້ວຈຶ່ງເມືອລວມລາວເລີຍ, ສ່ວນເພິ່ນເຂົ້າເປັນສຳມະຊິກພັກອິນດູຈີນນັ້ນ ໃນປີ 1951 ຢູ່ຫວຽດນາມ ສັງກັດໜ່ວຍພັກກວາງຈີແຂວງກວາງຈີ ໂດຍແມ່ນສະຫາຍດາວຈີ່ເປັນຜູ້ຮັບເອົາ. ບາດນີ້ມີຜູ້ຕິກລິງໃຫ້ເພິ່ນສຳຮອງພັກປະຊາຊົນປະຕິວັດລາວອີກ. ມີແລ້ວທ່ານສະໝານ ລາວເປັນສຳມະຊິກພັກອິນດູຈີນເກົ່າເດ ເຂົາກໍ່ເລີຍໃຫ້ລືມບູນເລີຍ, ບໍ່ມີສຳຮອງອີກ, ຂອງລາວເປັນສຳມະຊິກພັກອິນດູຈີນແລ້ວເດ. ບາດຫຼັງຈາກ ປີ 1957 ແລ້ວຂັ້ນເທິງ ກະໂຕລຸງສະໝານເອງ ຖາມລຸງບຸນຕັ້ງວ່າ: "ບຸນຕັ້ງເອີຍ ເຈົ້າຊິຢູ່ບໍ່

[54] ທ່ານ ເຂັມຄອນ ພົນຈັດຕະວາ ແລ້ວເວລາລວມລາວເພິ່ນບໍ່ໃຫ້ຕີ.

ຫຼື ຊິໄປຫວງດນາມໄປຮ່ຳຮຽນຕື່ມ, ຄັນເມືອກໍ່ດີຢູ່ກໍ່ດີ, ສຳຄັນແມ່ນເມືອຫັ້ນລະໃຫ້ຄືນເມືອຂະຫຍາຍໄວໆ ຂະຫຍາຍກຳລັງຫັ້ນນາ". ລຸງບຸນຕັງຄິດໄປມາເພິ່ນນອນບໍ່ຫຼັບ, ເພິ່ນອຸກໃຈຄິດວ່າໝູ່ປົດເອົາປືນ, ປົດຈາກກອງພັນຫົກຮ້ອຍຫ້າ (605) ເອົາປືນມາໂຮມກັນ, ແລ້ວມອບໃຫ້ຣາຊະອານາຈັກ, ຂອງວ່າລຸງສີຫົນກໍ່ລຸລ່ວງບໍ່ແຈ້ງ, ເພິ່ນໃຈຮ້ອນຂຶ້ນຮ້ວາຍພັດຊິໄປຍອມເຂົາບໍ! ລຸງຕັງເພິ່ນວ່າຂ້ອຍບໍ່ໄດ້ຍອມ, ເພິ່ນຖາມຄືນວ່າ: ຖ້າບໍ່ຍອມເປັນຫຍັງໝູ່ເຈົ້າ ຈຶ່ງຊິປົດປືນນີ້ໄປມອບໃຫ້ຣາຊະອານາຈັກ?, ເພິ່ນວ່າບໍ່ຍອມຂ້ອຍບໍ່ຍອມ, ດຶງເອົາກະໂຣນົບຂອງເພິ່ນຄືນ (ປືນຈັກຂອງເພິ່ນ) 80 ມໍມໍ ຂອງເພິ່ນ, ເພິ່ນອູ້ມມັນເລີຍມັນດົມມັນເດ, ເພິ່ນໂອ້ຍ! ເສຍດາຍປືນເດ ເປັນຫຍັງຈຶ່ງໄປມອບໃຫ້ຣາຊະອານາຈັກ? ເພິ່ນຍົກຂຶ້ນແລ້ວຍິງຊັດເປັນບັງ, ເປັນບັງ ໆ ໆ ພັນລູກເພິ່ນຍິງປັ້ງ ໆ ໆ ຈັກໜ່ອຍລຸງສີຫົນໄປແກ້ໃດ! ເພິ່ນວ່າບໍ່ໄດ້ໃດ່ນີ້! ເບິ່ງແມ່ນພວກ 605 ແມ່ນເຂົາເຮັດຫຍັງ ອີກກະທຶກເອົາແທ້ເອົາວ່າ? ປະທານໄປໂອ້ລົມໃດ່ ພວກເພິ່ນສົນທະນາກັນ ແລະ ບອກກັນໄປອະທິບາຍໃຫ້ພວກລຸງບຸນຕັງຟັງ, ຂອງລຸງບຸນຕັງທະຫານຊິນຊາດວ່າຊັ້ນ ທະຫານລາວເທິງຫັ້ນ ເຂົາບໍ່ຍອມໃດ[55], ລຸງບຸນຕັງບໍ່ແມ່ນວ່າບໍ່ຍອມ ແນວວ່າເຈົ້າບໍ່ອະທິບາຍໃຫ້ມັນຈະແຈ້ງ, ກໍ່ຄືວ່າໄປຍອມເຂົາແທ້, ປືນກິນເພິ່ນຍິງຈົນເມື່ອຍໝົດ ກອງພັນແນມເບິ່ງໃຜກໍ່ເບິ່ງ. ຫວິດຫັ້ນແລ້ວລຸງສີຫົນ ຈຶ່ງໄປອະທິບາຍ, ຫວິດລຸງສີຫົນແລ້ວລຸງສຸພານຸວົງຈຶ່ງໄປອະທິບາຍຕື່ມ: "ແນວນີ້ລະລູກເອີຍຫຼານເອີຍ ຂ້ອຍກໍ່ຈອມເຈົ້າເປັນແຫວ່ານເມືອໃຫ້ຫາກຳລັງໃຫ້ຫຼາຍ, ປັບປຸງໃໝ່ດຽວນີ້ ເຈົ້າຢ່າຄິດແນວນັ້ນມັນບໍ່ຖືກ, ແຕ່ໄລຍະນີ້ມັນບໍ່ອຳນວຍແລ້ວ". ລຸງບຸນຕັງວ່າ: ລຸງສຸພານຸວົງ ໄປແກ້ລຸງສີຫົນໄປແກ້, ຄັນຍັງບໍ່ດີໃຈຫັ້ນ ມື້ອື່ນເດີນທາງເມືອ 10 ແຂວງເດີ. ລຸງບຸນຕັງເວົ້າຕື່ມ: "ແນວນັ້ນຄັກ ແລະເຫັນດີນຳເພິ່ນ ແລະ ທ່ານສະໝານກໍ່ເຫັນດີ, ນ້ອງນີ້ເຫັນດີທີ່ສຸດແລ້ວອ້າຍເອີຍ". ໝູ່ຈັດຕັ້ງລຸງບຸນຕັງນີ້ເປັນຮອງເຈົ້າແຂວງ, ທ່ານເຂັມຄອນພົນຈັດຕະວານັ້ນໃຫ້ ເປັນຫົວໜ້າເຈົ້າ

55 ທະຫານຝ່າຍວຽງຈັນເລີ້ມດຳເນີນຂະບວນປາບປາມຝ່າຍແນວລາວຮັກຊາດ.

ແຂວງ, ລຸງບຸນຕັ່ງເປັນຮອງຮັບຜິດຊອບ 700 ຄົນ ພວກເພິ່ນເມືອແຕ່ຊຳເໜືອ ຈົນຮອດ 10 ແຂວງ ເມືອຮອດສາລະວັນໃຫ້ຄົບ 700 ຄົນ. ນາຍພົນຈັດຕະວາ ພັດມອບແມ່ຍິງອີກ 25 ຄົນ ໃຫ້ລຸງບຸນຕັ່ງເອົາເມືອບໍ່ໃຫ້ຕົກເຮ່ຍເສຍຫາຍ ເດີນາຍພົນວ່າ: ແມ່ຍິງນີ້ ໃຫ້ໝູ່ເຈົ້າກຳກັບຄັກແນ່ ຢູ່ໃນນີ້ ນອນໃນນີ, ລຸງບຸນຕັ່ງວ່າ: ເພິ່ນນອນໃສໝູ່ເຈົ້ານອນຫັ້ນ, ເພິ່ນກຳກັບແມ່ຍິງ, ຍ້ານພວກທະຫານຝ່າຍຂວາຊື້ຈ້າງ, ປານນັ້ນກໍ່ຍັງອີກກະທຶກບໍ່ແມ່ນງ່າຍ ເພື່ອຈະສົ່ງກຳລັງໃຫ້ຮອດສາລະວັນ, ຮອດຈຳປາສັກ, ອັດຕະປື, ສີ່ງຕອນນີ້ ແລະ ແຍກຈາກກັນເຕັມໝົດທິບນີ້. ພາກສ່ວນສາລະວັນແລ້ວພາກັນເມືອ, ບາດນີ້ແລ້ວ ລຸງບຸນຕັ່ງກັບເມືອເມືອງຕະໂອ້ຍ ແລະ ເພິ່ນເອົາໜັງສືເຊື້ອງຢ້ານມັນລັດຂ້າ, ເພາະວ່າເພິ່ນມານີ້ແລ້ວໝົດ ເຈົ້ານາຍສາລະວັນມາເບິ່ງໜ້າເພິ່ນ ຢາກເຫັນໜ້າຕາລຸງຕັ່ງວ່າຊັ້ນ ຂອງສຽງປາກເພິ່ນບໍ່ໄດ້ຢູ່ໄດ້ເຊົາ, ເພິ່ນເວົ້າ ປັບໆ ປັບໆ ຢູ່ແຮງກວ່າໝູ່; ພວກນາຍກອງລອຍ, ກາລູແນນສີງ, ຜູ້ແທນລຽບມາເບິ່ງພວກລຸງບຸນຕັ່ງຢູ່ນີ້ແລ້ວ, ລຸງບຸນຕັ່ງວ່າ: "ຮ້ວາຍຂ້ອຍມາໜີ້ບໍ່ແມ່ນມາຍອມ; ບໍ່ແມ່ນໃຈລາວຮັກລາວບໍ່ໄດ້ມາລວມ. ບໍ່ແມ່ນມາຍອມໝູ່ໂຕ! ອັນນີ້ເວົ້າຈິງເກາະ! ນີ້ເດໜັງສືຝຣັ່ງອັງກິດມີໝົດນີ້ ໜັງສືຝຣັ່ງສອງໃບບໍ່ແມ່ນມາຍອມຂອງໝູ່ເຈົ້າເວົ້າວ່າ ແມງເມົ່າບິນຜ່ານຟ້າ ບໍ່ມີມົ້ມປາກອີງຢາງວ່າຊັ້ນ". ຕອນນັ້ນພວກລຸງບຸນຕັ່ງມາສອງຝ່າມີເປົ່າຂອງເພິ່ນວ່າ ໃຫ້ມາລວມລາວເດ ແຕ່ລະຝ່າຍໃຫ້ປິດອາວຸດໝົດເສຍກ່ອນ ຫຼັງຈາກນັ້ນຈຶ່ງເບີກປືນຄືນໃຫ້ໃໝ່ວ່າຊັ້ນເດ. ຮ້ວາຍເພິ່ນວ່າມາຮອດລຸງບຸນຕັ່ງກໍ່ຖາມວ່າ:ປືນໃຫ້ພວກຂ້ອຍມີແລ້ວບໍ່ ພວກສະຫາຍເອີຍ, ເພິ່ນຖາມໃຫ້ເອົາຢູ່ໃສ? ເຂົາຕອບລຸງບຸນຕັ່ງວ່າ: ເອົາຢູ່ບາລອງພຸ້ນເດີ ຢູ່ສາງເມືອງຕະໂອ້ຍ ປືນຫັ້ນໝາ. ເມືອຮອດຕະໂອ້ຍແລ້ວພວກເພິ່ນກໍ່ພາກັນລ້າງປືນດີໆ ຜັດດີໆ ຕົ້ມນ້ຳຮ້ອນຄັກໆ ລວກໝົດປືນຫັ້ນລວກແລ້ວ ຈຶ່ງທານ້ຳມັນໃໝ່. ຍົກຍ້າຍເທື່ອນີ້ ພວກເພິ່ນໄດ້ຊື້ໝູ 20ໂຕ ປະຊາຊົນຊ່ວຍເຫຼືອແດ່, ເຂົ້າລຸງບຸນຕັ່ງກະກຽມແລ້ວ, ປິດຄ້າຍລຽບຸນຕັ່ງກະກຽມແລ້ວໝົດ ທຸກບ່ອນຢູ່ບ່ອນເຊົາ, ບາດນັ້ນລະຈະກິນບຳລຸງ, ບາດແລ້ວລະຄືຊິນອນຢູ່ພື້ນດິນ,

ໝູ່ລະບໍ່ຄິດຕີພວກລຸງບຸນຕັງ ຈຸໝູ່ເຂົາລະມັນບໍ່ແມ່ນການທະຫານ ລຸງບຸນຕັງພັດການທະຫານມັນລະຮ້ອນໃຈ. ຈັກໜ່ອຍພັດໄດ້ຍິນເຂົາວ່າຕີລະເຮີຍ ຕີແລ້ວ! ຕີເຮົາຫວາ! ລຸງບຸນຕັງຖາມຄືນ: ບໍ່ຕີຢູ່ປິດໜ່ອຍນີ້? ຕີຢູ່ປິດໜ່ອຍນັ້ນບໍ? ລຸງບຸນຕັງວ່າ ໂອ້ຍ! ເຈົ້າມາຕີຢູ່ປິດໜ່ອຍນີ້ສາກ່ອນແມ່! ສັດຕູມັນມາຕີມື້ໜຶ່ງ 30-40 ຄົນ ມັນມາຕີພວກລຸງບຸນຕັງ, ພວກທະຫານປະຕິການເຂົ້າມາຕີພວກລຸງບຸນຕັງດ້ວຍໄມ້ແສ້ຫວາຍ ມັນຕີຈົນຕາຍ. ມັນບັງຄັບໃຫ້ພວກລຸງບຸນຕັງ ເຮັດປິດໃຫ້ມັນແລ້ວ. ປິດຍັງອີກ 31ບ່ອນ ຍັງບໍ່ທັນໄດ້ຕອກໄມ້, ມັນກໍ່ເຮັດລວດມໍລະກົດໃຫຍ່ນຳຕີພວກລຸງບຸນຕັງມາ, ລຸງບຸນຕັງບໍ່ທັນໄດ້ຕອກຊ້ຳ. ໄວໆ ພວກມັນວ່າ. ລຸງບຸນຕັງຕອບວ່າ ໄວໆ ບໍ່ໄດ້ເຈັບກໍ່ອົດທົນເອົາເດີລຸງບຸນຕັງລະດົມປະຊາຊົນ. ບາດລຸງບຸນຕັງໄດ້ປືນ ລຸງບຸນຕັງຊິເຮັດວຽກມັນຄືນດອກເພິ່ນເວົ້ານຳປະຊາຊົນ.

ແລ້ວບາດນີ້ ພວກລຸງບຸນຕັງໄດ້ປືນໝົດແລ້ວ, ໃນວັນທີ 23 ເພິ່ນກໍ່ຊິເລີ່ມຕົ້ນຕີໂລດ, ຄັນເພິ່ນຕີຊຸດນີ້ໝໍຊຸມຄອງພັດວ່າ: ເຂົາຊິຂ້າຜູ້ນຳຢູ່ໃນຄຸກ! ຕອນນັ້ນສະຖານະການຄັບຂັນຫຼາຍ, ພວກມັນຈັບເຈົ້າສຸພານຸວົງອີກ ເຂົາວ່າຊິຂ້າ. ຫຼາຍຄົນຕັ້ງຄຳຖາມວ່າ ເພິ່ນຊິຂ້າເຈົ້າສຸພານຸວົງ ການນຳຂອງພວກເຂົາແມ່ນບໍ່ໄດ້. ວ່າຕັ້ງຄິດອີດູລຸງອີດູເດເຂົາຊິຂ້າອີ່ຫຼີ ! ບ່ະ! ລຸງບຸນຕັງພັດຄິດເບິ່ງຈັ່ງໜຶ່ງ, ຕັດສິນໃຈແລ້ວວ່າຂ້າກໍ່ຂ້າຕາຍກໍ່ຕາຍ, ເພິ່ນວ່າເພິ່ນກໍ່ຍັງຢູ່, ລຸງຕັງວ່າ ເພິ່ນກໍ່ແມ່ນສຸພານຸງວົງຜູ້ໜຶ່ງ. ລຸງບຸນຕັງພັດຄິດຈັ່ງໜຶ່ງວ່າ ເຂົາບໍ່ຂ້າດອກເຊື້ອເຈົ້າເດ ບໍ່ຂ້າເດັດຂາດ. ລຸງບຸນຕັງໄດ້ແຕ່ເວົ້າພຶມພຳແນວນັ້ນຜູ້ດຽວ. ລຸງບຸນຕັງວ່າ ຕີ! ເພິ່ນຕ້ອງຕີ. ຕອນແລງມື້ອື່ນເພິ່ນວ່າຕ້ອງກຽມເພິ່ນໃຫ້ອ້າຍນ້ອງກຽມທະຫານ 100 ປາຍຄົນ, ເພິ່ນຊິພາເດີນທາງໄປຕີເລີຍ, ຕີແບບຂ້າຕາຍໂລດເພິ່ນວ່າ. ຮອດມື້ຕໍ່ມາ ພວກລຸງບຸນຕັງກໍ່ຍົກທັບໄປຕີປິດປະງານດາວ ມັນຢູ່ຫັ້ນກອງພັນໜຶ່ງ, ພວກລຸງບຸນຕັງມີສອງກອງຮ້ອຍ ພວກເພິ່ນຕີສັດຕູແຕກ, ຂ້າພວກມັນຕາຍກັບບ່ອນ 30 ກວ່າຄົນ, ຍຶດປືນໄດ້ 50 ກະບອກ ຈັບມັນໄດ້ອີກ 5 ຄົນ (ພວກກົມມະໂດ ກົມມະດຳ ມາແຕ່ຈັ່ງຫວັດ

ໃດ.....ນີ້ລະ). ແນ! ເພິ່ນວ່າຊະນະແລ້ວບາດນີ້, ບາດນີ້ລຸງບຸນຕັ່ງເອົາປືນຊຸມນີ້ມອບໃຫ້ກອງຫຼອນ, ເພິ່ນເອົາແຕ່ປືນເພິ່ນເອງໄປຕີຕໍ່, ຍັງແຕ່ປືດໃຫຍ່ ປືດລະວິຍັງໃຣ! ຂັ້ນເທິງຖາມລຸງຕັ່ງ: ມື້ນີ້ເຈົ້າຊິຕີປົດລະວີອີກ, ປົດລະວີນີ້ມີກອງພັນແໜ້ນໜາ, ມີປືນໃຫຍ່ປືນນ້ອຍຄົບ, ລຸງຕັ່ງຄິດວ່າ: "ຖ້າລັດຕີປົດຫຼືຕີຕາມທາງນີ້ຂ້ອຍບໍ່ມັກ ຕ້ອງຕີປົດບ່ອນມັນມາໂຮມກັນສະບາຍຂ້ອຍບໍ່ຢ້ານ ຂ້ອຍຂໍແຕ່ເດກາ 2ກະບອກ ປືນກົນໜັກກະບອກໜຶ່ງ ເອົາລູກປືນລະຫວ່າງ 100ລູກມາໃຫ້ຂ້ອຍ". ບາດນີ້ລຸງບຸນຕັ່ງຕີສາຍອາໂຫຼງ ທາລັດຖະບານກະຊວງປ້ອງກັນປະເທດເພິ່ນວ່າ: "ສິ່ງກຳລັງໃຫ້ຂ້ອຍແດ່! ສູນກາງລາວບໍ່ມີມາຊ່ວຍບໍ, ມີບໍຫວຽດນາມ, ມີແຕ່ຫວຽດກໍ່ເອົາ ເອົາກອງຮ້ອຍໜຶ່ງເດີມາບວກໃສ່ພວກຂ້ອຍ 180ຄົນ ເອົາຫວຽດອີກ 100ຄົນ ມາໆມາໄວໆ ໃຫ້ເຂົ້າມາໂລດຂ້ອຍໄດ້ກຽມເຂົ້າກຽມນ້ຳຄົບໝົດແລ້ວ ກຽມຢູ່ນີ້". ຕໍ່ມາພວກລຸງບຸນຕັ່ງກໍ່ຕີປົດລະວີແຕກ ! ບໍ່ແຕກແນວໃດປືນສອງເລົາ ກໍ່ມີເລົານັ້ນແດງ ຍັດເລົານີ້ໃສ່ ບິບເປັນພັນລູກໂລດໜາ ບໍ່ໃຫ້ມັນເງີຍຫົວຂຶ້ນໄດ້, ຕີຕາມຂຸມຕະຄອງເລີຍ. ພວກລຸງບຸນຕັ່ງໄດ້ແບ່ງເປັນກຸ່ມ 30 ຄົນ ຈັດຕັ້ງກັນຕີສັດຕູຕາມຂຸມຕະຄອງເລີຍ. ບັກກົມມັງໂດກໍ່ເສັດ, ຖືວ່າສັດຕູເງີຍຫົວບໍ່ໄດ້, ຢຽບເປັນພັນໆ ລູກເດກາ 2ກະບອກ ລູກໜຶ່ງ 20ລູກຍິງໂລດ ເອົາວ່າບາດນີ້ 82 ມໍມໍ 5 ກະບອກ ໂອ້ຍ! ເພິ່ນບັນຊາລວມມີຫວຽດໝໍໜຶ່ງ, ໝໍນີ້ມີເຕັກນິກ ໃນການຍິງປືນໃຫຍ່ 12 ແມັດ ເສັດ, ຍິງຍິນຄັນໜຶ່ງຕົກ ຖືວ່າດັບສູນສັດຕູໄດ້ໝົດຢູ່ຫັ້ນ ຕາຍກັບບ່ອນ 22-23 ບັກ, ຈັບໄດ້ທັງເປັນ ອີກ 8-9 ບັກ, ຍຶດປືນໄດ້ 100 ກວ່າກະບອກ ແລະ ເຄື່ອງຂອງອື່ນໆໄດ້ໝົດ, ຖືວ່າປົດປ່ອຍແລ້ວ ລຸງບຸນຕັ່ງກໍ່ກັບເມືອສະຫວັນນະເຂດ. ບາດນີ້ເພິ່ນໄປຮອດສະຫວັນນະເຂດ, ທາງສະຫວັນນະເຂດກໍ່ຂໍໃຫ້ເພິ່ນຢູ່ຊ່ວຍຕີປົດເມືອງນອງ ເພາະວ່າຢູ່ສະຫວັນນະເຂດຕອນນັ້ນຍັງບໍ່ທັນມີກຳລັງພຽງພໍເທື່ອ ທາງຄະນະພັກແຂວງສະຫວັນນະເຂດ ເຊີນລຸງບຸນຕັ່ງກັບຄືນໄປພຸ້ນ, ໃນປີ 1962 ໃຫ້ລຸງບຸນຕັ່ງເມືອຢູ່ພຸ້ນ ເມືອສ້າງກຳລັງຢູ່ສະຫວັນນະເຂດ. ທຳອິດລຸງບຸນຕັ່ງສ້າງໄດ້ກອງຮ້ອຍໜຶ່ງ, ແລ້ວຈຶ່ງໄປຕີກັບ

ພວກທະຫານ ເຈົ້າບຸນອູ້ມຍຶດປືນໄດ້ 100 ກວ່າກະບອກ ແລະ ລຸງບຸນຕັງໄດ້ປະກອບໃຫ້ກອງຫຼອນ 300 ຄົນ, ປັບປຸງທະຫານແຂວງ ຈັດຕັ້ງກອງພັນ 14, 18, 16, 19 ກອງພັນທີ 9 ອີກພໍດີ 6 ກອງພັນ ຕອນເພິ່ນກໍ່ສ້າງກອງກຳລັງຢູ່ຫັ້ນ ທາງແຂວງສະຫວັນນະເຂດໄດ້ຕົກລົງໃຫ້ເພິ່ນເປັນກອງບັນຊາການທະຫານສະຫວັນນະເຂດ! ເພິ່ນເຫັນລຸງບຸນຕັງເຮັດດີແນວນັ້ນ ເພິ່ນກໍ່ໃຫ້ລຸງບຸນຕັງເປັນກອງບັນຊາການຢູ່ແຂວງສະຫວັນນະເຂດ. ເພິ່ນວ່າ: ອ້າວ! ເປັນກໍ່ເປັນ. ທາງແຂວງເພິ່ນມີລົດອາແອັມ 12 ຄັນ ມີລົດຕັງອີກຈຳນວນໜຶ່ງ, ຖ້າລຸງບຸນຕັງຕ້ອງການໃຊ້ໃຫ້ເພິ່ນໄປເອົາຢູ່ນຳສະຫາຍຄຳຜີວເດີ ຢູ່ກອງຮ້ອຍຫັ້ນມີລົດຕັງຂະໜາດ 80 ໂຕນ, ຖ້າບໍ່ເອົາກໍຂໍລົດອາແອັມນີ້ໄປສາກ່ອນ ໄປໃຊ້ນີ້ເພື່ອປັບປຸງ. ພໍດີໄດ້ 6 ກອງພັນທົ່ວພື້ນທີ່ຂອງແຂວງກັບ 7 ກອງຮ້ອຍເອກກະລາດ 10 ໝວດທະຫານຫຼວງ ລຸງບຸນຕັງສ້າງໝົດ 20 ປີ ຢູ່ສະຫວັນນະເຂດນີ້, ຄືແຕ່ປີ 1962 ເພິ່ນຍ້າຍມາແຕ່ຕະໂອ້ຍ ແລ້ວເພິ່ນໄປພຸ້ນ (ໄປສະຫວັນນະເຂດ), ທາງນັ້ນເພິ່ນເອີ້ນ. ຫວິດຫັ້ນມາ ລຸງບຸນຕັງຂຶ້ນມາຕີເລີຍຢູ່ພຸ້ນເລີຍແລ້ວ, ແຕ່ຫາກເພິ່ນຂຶ້ນມາຕີບ່ອນນີ້. ໃນເວລານັ້ນເມືອງຕະໂອ້ຍ ກໍ່ຂຶ້ນກັບແຂວງສະຫວັນນະເຂດ, ສະໄໝການປະຕິວັດບໍ່ແມ່ນຂຶ້ນກັບສາລະວັນ, ເພິ່ນຫາກໍ່ມອບໃຫ້ນຳຫຼັງນີ້, ແຕ່ວ່າເຜົ່າຕະໂອ້ຍຢູ່ຕົວເມືອງສະຫວັນຫັ້ນຫຼາຍປະມານ 4-5 ຮ້ອຍຄົນພຸ້ນເກາະ, ມີແຕ່ຄົນຕະໂອ້ຍ ເກາະປ້ອງກັນຢູ່ພາຍໃນເປັນຕົ້ນແມ່ນຢູ່ໃນຂັ້ນການນຳ ພວກເຮົາເຊັ່ນວ່າ: ຄອບຄົວຂອງທ່ານໄກສອນ, ລຸງພູນ ສີປະເສີດ ລ້ວນແຕ່ແມ່ນຄົນຕະໂອ້ຍ ເປັນຜູ້ຮັກສາຄວາມສະຫງົບໃຫ້ແກ່ຄອບຄົວ ແລະ ພໍ່ແມ່ຂອງພວກເພິ່ນ. ເພາະສະນັ້ນທ່ານໜູຮັກ ເວົ້າບໍ່ໄດ້, ເຫັນບໍທ່ານໜູຮັກ ເພິ່ນບໍ່ໄດ້ປະບໍ່ໄດ້ຖິ້ມໃດເຜົ່າຕະໂອ້ຍ ຍ້ອນແນວນັ້ນລະ ພໍຮອດປີ 1976 ລຸງບຸນຕັງຈຶ່ງໄດ້ຍົກຍ້າຍຈາກຫັ້ນໄປສັງກັດຢູ່ກົມການບິນທະຫານວຽງຈັນ ຢູ່ເສນາທິການກະຊວງປ້ອງກັນປະເທດ ແລະ ເພິ່ນໄດ້ມອບໝາຍ ໜ້າທີ່ຈາກກົມການໃຫຍ່ໃຫ້ເພິ່ນຮັບຜິດຊອບທະຫານທ້ອງຖິ່ນ ກຳກອງຫຼອນທົ່ວປະເທດ ເພິ່ນຢູ່ຫັ້ນປະມານ 8-9 ປີ. ຕໍ່ມາພັດໄດ້ມີ ສະພາບຄວາມ

ຫຍຸ້ງຍາກ ທາງແຂວງສະຫວັນນະເຂດຍັງຕີກັນຢູ່ ທາງແຂວງສາລະວັນກໍ່ຍັງວຸ້ນວາຍເປັນຕົ້ນ ແມ່ນແຖວຕຸ້ມລານວຸ້ນວາຍຫຼາຍໆແທ້. ໄລຍະນັ້ນປະຕິການກໍ່ຍັງຫຼາຍ, ທາງເຈົ້າແຂວງ ກໍ່ຂໍນຳທ່ານສີພອນ (ເວລານັ້ນ ເພິ່ນຍັງມີຊີວິດຢູ່) ທ່ານສີພອນພັດວ່າ: "ຂໍໃຫ້ຂັ້ນເທິງເອົາສະຫາຍຕັ້ງລົງມາຊ່ວຍແດ່, ເອົາມາສາລະວັນພີ້ໜາ, ມີແຕ່ລາວເທົ່ານັ້ນທີ່ສາມາດເວົ້າໄດ້ນຳເຜົ່ານຳພັນເຫຼົ່ານີ້ຍາກຫຼາຍນຳເຜົ່າກະຕາງ ເຜົ່າລາວລຸ່ມນີ້, ພວກເຂົາບໍ່ເຮັດວຽກດຽວນີ້ຍັງມີປະຕິການຢູ່". ບາດນີ້ພໍດີ ທ່ານຄຳໄຕມອບໃຫ້ສະຫາຍຕັ້ງເມືອເດີ, ດຽວນີ້ເຈົ້າແຂວງຂໍລາວເລື່ອງເມືອຊ່ວຍສາລະວັນຫັ້ນ. ບາດເພິ່ນມອບໃຫ້ລຸງຕັ້ງຄືແນວນັ້ນກໍພໍດີ ລຸງບຸນຕັ້ງກໍ່ເວົ້າວ່າ: "ຢູ່ທາງສາລະວັນກໍ່ມີນາຍພົນ ນາຍພັນແລ້ວ, ທະຫານຜູ້ມີບົດບາດແລ້ວກໍ່ມີ, ປະໃຫ້ນ້ອງໄປໃສ່ຫ້າແຂວງພາກເໜືອ ນ້ອງຊິໄປໃສ່ເສີກແມ້ວ, ບ່ອນອັນນີ້ຫຍຸ້ງຍາກນ້ອງກໍ່ໄປຫຼວງພະບາງບໍ? ຫຼວງນ້ຳທາ, ອຸດົມໄຊ, ໄຊຍະບູລີ ຫຼື ສາມລ່ຽມທອງຄຳ ລຸງຕັ້ງຊິໄປໝູ່ຕາຍເພິ່ນຕາຍ ໝູ່ເປັນເພິ່ນກໍ່ເປັນ, ເພິ່ນບໍ່ເມືອໃດ " ໝົດເດືອນໜຶ່ງເພິ່ນບໍ່ຍອມເມືອຢາກເຂົ້າ 2 ເດືອນພຸ້ນ. ເພິ່ນວ່າໂອ້ຍ! ເພິ່ນຍັງຄຶກມຶກບໍ່ຍອມເມືອ! ແລ້ວ ທ່ານຄຳໄຕ ເວົ້າວ່າ ສະຫາຍຕັ້ງບໍ່ໄປບໍ່ໄດ້, ຄັນບໍ່ໂອ້ລົມລາວໃຫ້ເຂົ້າໃຈລາວບໍ່ໄປໃດ. ຕໍ່ມາເພິ່ນເອີ້ນລຸງບຸນຕັ້ງໄປເຮືອນ, ເຮືອນເມຍລາວນອນຢູ່ຄ້ອຍໂພນເຄັ່ງນີ້. ທ່ານຄຳໄຕວ່າ: "ເອີ້ນສະຫາຍຕັ້ງມາໜີ້ ຍ້ອນຄວາມຮຽກຮ້ອງຕ້ອງການຕັ້ງໂອຍ! ບໍ່ແມ່ນວ່າຢາກໄປທາງໃດແລ້ວກໍໄປບໍ່ແມ່ນ! ເຈົ້າເວົ້ານຳຊົນຊາດຊົນເຜົ່າຕ່າງໆ ໄດ້ເຜົ່າຕະໂອ້ຍກໍ່ໄດ້ ເຜົ່າມະໂກກໍ່ໄດ້, ໄດ້ໝົດເຈົ້າມີບົດບາດໃນທ້ອງຖິ່ນ! ດຽວນີ້ໃຫ້ເຈົ້າລົງເມືອເສຍຢູ່ສາລະວັນຫຍຸ້ງຍາກຫຼາຍ ເຈົ້າເບິ່ງນີ້ຢາກແຕກບ້ານແລ້ວເຜົ່າກະຕາມຕຸ້ມລານນີ້ ຢາກແຕກໝົດແລ້ວ ຂອງແນວວ່າປະຕິບັດການມັນຂ້າຕຳຫຼວດ 3-4ຄົນ ຕາຍຍາກແລ້ວເຂດນັ້ນ ເອົາທັງລູກເອົາທັງເມຍ ເຈົ້າເມືອເລີຍສາ ເອົາຍົນຄັນໜຶ່ງເມືອເລີຍໄປ. ອີຫຼີບໍ່, ລຸງບຸນຕັ້ງຖາມເພິ່ນຄືນ: ຄັນຊັ້ນເພິ່ນຂໍຖາມແດ່ວ່າໃຜກຳນາຍຍອດ, ຖືວ່າຈອມຍະໂຍບາຍແມ່ນໃຜ? ທ່ານຄຳໄຕຕອບ ຢູ່ນຳເພິ່ນນີ້ໜາເພິ່ນນີ້ໜາກຳຈອມ, ເຈົ້າໄປໂລດນາ ໃນເມື່ອ

ເຈົ້າຕ້ອງການ ແລະ ໄປໂລດ. ລຸງບຸນຕັງວ່າ ເອີຄັນຊັ້ນລະນ້ອງຊິໄປໄປໝົດ ຄອບຄົວກໍ່ໄປ ໃຫ້ສຸວັນໄປສົ່ງແຕ່ໂພນເຄັງຈົນຮອດສະໜາມບິນ, ເອົາເຮືອບິນຄັນໜຶ່ງໃຫ້ລຸງຕັງກັບເມຍລົງປາກເຊ. ແນວນັ້ນລະແມ່ນລຸງບຸນຕັງເລີຍມາຮອດພີ້, ປຸກລະດົມຕຸ້ມລານລົງພື້ນຖານນຸ່ງສິ້ງເສື້ອຂາດໆໄປ ແລະ ໄປອົບຮົມປະຊາຊົນໄປບ້ານນັ້ນບ້ານນີ້ ແຕ່ໜີໄປ 60 ຫຼັກ, ໝູ່ວ່າບໍ່ມີລົດເພິ່ນຍ່າງເອົາ ລຸງບຸນຕັງນີ້ຍ່າງແຕ່ນີ້, ເຈົ້າແຂວງວ່າບໍ່ມີລົດຊິເຮັດແນວໃດ, ເພິ່ນວ່າບໍ່ມີລົດກໍໄປຂອງມີໜ້າທີ່ໄປແລ້ວ, ເພິ່ນບໍ່ຢ້ານ 3 ເດືອນເພິ່ນກໍ່ຍ່າງແລ້ວ ແຕ່ໜີ້ຮອດຊຳໂອ້ຍ! ລຸງບຸນຕັງໄປ, ແຂວງຕິດຕໍ່ໃຫ້ເພິ່ນຜູ້ໜຶ່ງພໍໄດ້ອອງເຄື່ອງຂອງເພິ່ນມັນເມື່ອຍ! ເຂົາກໍ່ຕິດຕໍ່ ໃຫ້ເພິ່ນຜູ້ໜຶ່ງ. ຕະຫຼອດ 3 ເດືອນ ລຸງບຸນຕັງ ວາງແຜນການຄິດຢາກເຮັດ ຊິເຮັດແນວໃດ? ສັດຕູຈັກໜ່ອຍໄປຍິງປັ້ງ ຢູ່ບ່ອນໜີ້ຈັກໜ່ອຍໄປຍິງປັ້ງຢູ່ຫັ້ນຍາກ! ລຸງບຸນຕັງເລີຍວາງແຜນ, ເພິ່ນຍົກບັນຫາໜຶ່ງຂຶ້ນມາວ່າ: ໃຜມີຫວ້ານກ້ານກາມີຢາກ້ານກໍາບໍ? ຜູ້ມີຢາມີຈັກຄົນໃນແຕ່ລະບ້ານ; ບັນຫາສອງລະແມ່ນມີໃຜໄປນຳປະຕິການຈັກຄົນ, ປະຕິການຈັກຄົນລູກເມຍເດຍັງບໍ? ອັນທີສາມ: ດຽວນີ້ຫັ້ນໃຜໄປລ້ຽງເຂົ້າແຕ່ບ້ານຫງວໄປຫງວມາ, ໄປລ້ຽງພວກກະບົດຄິດຈາກປະຕິການຢູ່ພຸ້ນ ແມ່ນໃຜເຈົ້າຮູ້ບໍ່, ໃຜມີບັນຫາ ແລະ ຫຍຸ້ງຍາກຄືແນວໃດ, ເຈົ້າກົກເຈົ້າເລົ່າບ່ອນມີຫວ້ານແນວໃດ? ຫວ້ານຊະນິດ ໃສ່ຜູ້ນັ້ນໃສ່ຜູ້ນີ້ ມີຈັກຄົນ ຖືວ່າລຸງຕັງໄດ້ສືບໄປໝົດ ເຕັມປຶ້ມເພິ່ນ ແລະໄດ້ຈົດລາຍອຽດແຕ່ລະຄົນໄວ້. ຕໍ່ມາເພິ່ນກໍ່ວາງແຜນສ້າງບາດນີ້. ກ່ອນອື່ນໝົດແມ່ນເພິ່ນດັດສ້າງພາກສ່ວນພໍ່ບ້ານເພິ່ນ ເອົາພໍ່ບ້ານກ່ອນຫວິດພໍ່ບ້ານແລ້ວ ເພິ່ນເອົາພາກສ່ວນໄປເປັນປະຕິການໂອ້ລົມໄປຈຸນັ້ນອາທິດໜຶ່ງ, ຈຸນີ້ອາທິດໜຶ່ງໄປຈັ່ງຊັ້ນ. ຈາກນັ້ນເພິ່ນກໍ່ກິນນ້ຳສາບານ[56] ຕົວໃດເອີ! ເພິ່ນວ່າ: ໃຜ

56 ຕາມປະເພນີຂອງເຜົ່າແມ່ນກິນນ້ຳສາບານກັນ, ວິງວອນຕໍ່ເທວະດາພະຍາແຖນລະແມ່ນສິ່ງສັກສິດທີ່ສຸດ, ຊຶ່ງເຄີຍເຊື່ອຖືກັນມາແຕ່ບູຮານ ນ້ຳນັ້ນແມ່ນນ້ຳເຫຼົ້າໄຫ, ສຽບປາຍດາບພ້ອມດ້ວຍເລືອດໄກ່, ຫຼືເລືອດຄົນ, ຄວາມສາບານກັນວ່າ: ຄັນຜູ້ໃດຄິດແລ້ວໃຫ້ຕາຍ, ຄັນຜູ້ໃດຊື່ແລະໃຫ້ເປັນຄົນ.

ເຮັດນຳພັກລັດ ໃຜຢາກເຮັດນຳຜີ ໃຫ້ໝູ່ເຈົ້າເຊັ່ນນຳລຸງຕັ້ງພາກສ່ວນເຈົ້າກົກລ່າມເຊັ່ນໝົດ, ຂໍໄປນຳເຂົາອ້າວເຊັ່ນ, ຄັນໄປນຳຜີບໍ່ເຊັ່ນ, ລຸງບຸນຕັ້ງວ່າໄປແບບນັ້ນຈິກະຈູເດ ບ້ານຈະມູກະເຊັ່ນ ອ້າວຂອງລູກລາວກໍ່ໄປທະຫານປະຕິການຍິງກັນຢູ່ຄູ່ມື້ຄູ່ມື້, ບຸດລະໄປປາບບ່ອນນັ້ນບ່ອນນີ້ເຂີຍມັນກໍ່, ລູກມັນກໍໄປ 4-5 ຄົນໄປໝົດ. ລຸງບຸນຕັ້ງ ແລະ ຖາມ: "ພໍ່ເຖົ້າແຊ່ລູກປືນໃດລູກກາລະບິນເອົາເຈົ້າກິນຄັນເຈົ້າສັດຊື່ ໃຫ້ເຈົ້າໃສຄືນ້ຳນີ້, ຖ້າເຈົ້າຄິດໃຫ້ເຈົ້າຕາຍນຳລູກປືນຂ້ອຍໜີ້ ຂ້ອຍຊິຍິງຫົວເຈົ້າ". ບາດລຸງບຸນຕັ້ງໄດ້ເຮັດແລ້ວ ເພິ່ນເຮັດຄັກເຮັດແນ່ແທ້ ເພິ່ນໄດ້ເລີ້ມຕົ້ນສຶກສາກອງຫຼອນ, ເພິ່ນເລືອກເອົາກອງຫຼອນຜູ້ດີ ມາອົບຮົມແລ້ວປ່ອຍໄປຢູ່ນຳສັດຕູ. ເພິ່ນຈັ່ງຊິຮູ້ວ່າສັດຕູຢູ່ໃສ, ໃຜເປັນຜູ້ລ້ຽງເກືອມັນຂັ້ນເຈົ້າເມືອງກະບໍ່ຮູ້ ເຈົ້າເມືອງຕຸ້ມລາມກະບໍ່ຮູ້ຈັກ ຈັກໃຜເປັນໃຜ, ຈັກແມ່ນໃຜຄົນເພິ່ນ ຈັກແມ່ນໃຜຄົນໂຕ. ໃນເວລານັ້ນ ລຸງບຸນຕັ້ງບໍ່ໄດ້ໃຫ້ຫຍັງລາວເລີຍເງິນຄຳບໍ່ມີຈັກກີບ ເອົາເງິນຢູ່ໃນນ້ຳລາຍນີ້ລະທິດສະດີນີ້ລະ ລາວກໍ່ໄປໄດ້ເດືອນໜຶ່ງເດືອນທີ 2 ລາວຈຶ່ງແຕ້ມແຜນທີ່ໃຫ້ລຸງບຸນຕັ້ງບ້ານນີ້ໄປສິ່ງເຂົ້າແມ່ນຜູ້ນີ້ ບ້ານນັ້ນແມ່ນຜູ້ນັ້ນ, ໄປສິ່ງເຂົ້າລາວບອກໝົດຂອງເຫັນເດ ຂອງເຂົາເອົາໝູເອົາໄກ່ໄປສິ່ງ. ໝົດບາດນີ້ເສຍລັບໝົດ, ບັນຊີຢູ່ນຳລຸງບຸນຕັ້ງໝົດບາດນີ້ລຸງບຸນຕັ້ງ ຈຶ່ງເອົາກຳລັງທະຫານໄປຕີລຸງບຸນຕັ້ງຂໍຕີແລ້ວບາດນີ້, ແຕ່ບໍ່ໄດ້ຮັບຜົນເທົ່າທີ່ຄວນ, ນາຍທະຫານບໍ່ເຂັ້ມແຂງ, ລຸງບຸນຕັ້ງຢາກຮ້າຍ, ລຸງບຸນຕັ້ງຢາກປິດຊັ້ນປິດຕ່ຳແໜ່ງພວກນີ້ເຮັດບໍ່ຫຼອນໜ້າທີ່, ໄດ້ຂ້າແຕ່ 2 ຄົນ, ເຈັບ 3 ຄົນ ຍິງເບ 40 ບໍ່ແຕກຊ້ຳ, ຮູ້ແນວນັ້ນລຸງບຸນຕັ້ງເຮັດເອງດີແລ້ວ. ບາດກັບມາຊຸດນີ້ຂັ້ນເທິງເພິ່ນວ່າລຸງບຸນຕັ້ງເຮັດອຸ່ນອ່ຽນ ຫຼື ວ່າມີບົດຮຽນໃນການຂົນຂວາຍ ເພິ່ນຈຶ່ງສັບຊ້ອນໃຫ້ລຸງບຸນຕັ້ງມາເປັນກອງບັນຊາການຢູ່ທາງແຂວງໄດ້ມີດຳລັດ ເຫັນດີແລະສະເໜີໃຫ້ສະຫາຍສົມສັກ ພ້ອມສະຫາຍສິງຄາມເສນາທິການ ສະຫຼຸບຜົນງານຢູ່ວຽງຈັນ ເພິ່ນວ່າບົດຮຽນການຕໍ່ສູ້ຕ້ອງຮຽນນຳສະຫາຍຕັ້ງເດີ, ລາວເຮັດດີຫວ້ານກ້ານກາຍາກ້ານກໍ່າລາວຮື້ໝົດ (ລົບລ້າງໝົດ), ໃຜເປັນປອບເປັນໂພງກໍ່ຮື້ໝົດ, ໃຜຫຍຸ້ງຍາກກວ່າໝູ່ລາວຮື້ໝົດຢູ່ຕຸ້ມ

ລານ ຖາມໂລດ. ເລີຍບໍ່ມີອີ່ຫຍັງຫຼວງຫຼາຍດອກເວລານັ້ນ ຊັ້ນຕຳແໜ່ງຂອງລຸງບຸນຕັ້ງຕອນນັ້ນ ພັນໂທ! ເພິ່ນກໍ່ພັນໂທແນວນັ້ນທັ້ນລະ ເພິ່ນຫາກບໍ່ວິນບໍ່ວາຍນຳເລື່ອງຊັ້ນເລື່ອງຕຳແໜ່ງປານໃດ.

ເພິ່ນເຮັດໄປກໍ່ຍ້ອນອິດທົນເຫັນຄວາມທຸກຍາກຂອງພໍ່ແມ່ປະຊາຊົນບໍ່ໄດ້ ແລະຢາກໃຫ້ປະເທດຊາດ ຢາກໃຫ້ປະຊາຊົນນັ້ນ ຫຼຸດພົ້ນອອກຈາກຄວາມຫຍຸ້ງຍາກດັ່ງກ່າວ. ອັນທີ່ລຸງບຸນຕັ້ງເຮັດມານີ້ຫາກເມື່ອຍໃດ ຂອງແນວວ່າເພິ່ນເຮັດບໍ່ໄດ້ຢູ່ໄດ້ເຊົາ, ເພິ່ນເຮັດໝົດມື້ໝົດເວັນເອົາຢູ່ຈັ່ງຊັ້ນ. ມານີ້ເພິ່ນຈຶ່ງໃຫ້ລຸງບຸນຕັ້ງເຮັດກອງບັນຊາການຈົນຮອດອອກບຳນານ ໃນປີ 1989, ກ່ອນຈະອອກບຳນານ ໝູ່ຍັງໃຫ້ເພິ່ນໄປເຮັດປະທານແນວໂຮມອີກປີໜຶ່ງ, ໄປຢູ່ນຳແນວລາວສ້າງຊາດເພິ່ນກໍ່ໄປເຮັດອີກແລ້ວ ເພິ່ນຈຶ່ງຂໍພັກຜ່ອນ ເຮີຍອາຍຸເພິ່ນໄດ້ 81-82 ປີແລ້ວ ເພິ່ນວ່າເຊົາໆສາກ່ອນ ສຸຂະພາບກໍ່ບໍ່ດີແນວນັ້ນໃດ. ຊີວິດພັນໂທບຸນຕັ້ງ.

ບາດນີ້ຕອນປົດປ່ອຍໃໝ່ ໃນຕົ້ນປີ 1976 ລຸງບຸນຕັ້ງເມືອຢູ່ພຸ້ນຫຼັງຈາກເຮັດໜ້າທີ່ ຫົວໜ້າກົມທະຫານທ້ອງຖິ່ນແລ້ວ ທາງກະຊວງທາງຂັ້ນເທິງໄດ້ມອບໜ້າທີ່ໃຫ້ເພິ່ນໄປທາງ 5 ແຂວງພາກເໜືອຢູ່ທັ້ນພໍດີ ລຸງສີພອນ ແລະ ທ່ານຄຳໄຕ ພາກັນເວົ້າວ່າຊິເອົາໃຜໄປພຸ້ນ, ເອົາສະຫາຍຕັ້ງ, ລຸງບຸນຕັ້ງວ່າ: “ໂອ ເອົາແຕ່ກະດູກຫຍາບນີ້ລະນໍ ລາວເທິງຄືຂ້ອຍນີ້ລະຫຍາບແລ້ວບໍ່, ອັນໃດຫຍຸ້ງຍາກລະໃຫ້ຂ້ອຍ, ເປັນຫຍັງບໍ່ໄປເອົາຜູ້ອື່ນ ຄັນໄປລະເອົາທະຫານດັກກົງ, ໃຫ້ເພິ່ນໝົດໃດ ທະຫານພັນທະບໍ່ເອົາ, ຕ້ອງເອົາທະຫານດັກກົງ, ໃຫ້ເພິ່ນສຸດແລ້ວແຕ່ລຸງຕັ້ງ 500 ກໍ່ຕາມ ພັນຄົນກໍ່ຕາມ ຕາຍໝົດກໍ່ຢ່າດັກກົງຕາຍໝົດລຸງຕັ້ງວ່າຕາຍກໍ່ຕາມ”. ຂັ້ນເທິງກໍ່ຕອບສະໜອງເພິ່ນໃຫ້ລຸງບຸນຕັ້ງຜູ້ສືບຂ່າວແຂງແຮງອີ່ຫຼີໄປທັ້ນ, ເພິ່ນໄປລະນໍ ເພິ່ນກຽມເອົາປືນ ເອົາຍົນບີ 8 ແບບທະຫານອາເມລິກາ ແບບທະຫານທົມ ແຕ່ກ່ອນໄປສິ່ງລຸງຕັ້ງບາດໝູ່ສິ່ງລຸງບຸນຕັ້ງໄປຮອດສາມລ່ຽມທອງຄຳແລ້ວກໍ່ເລີຍໄປວັບຫາຍໄປແລ້ວນໍ, ລຸງບຸນຕັ້ງກໍ່ປັບປຸງອ້າຍນ້ອງຈັດຕັ້ງອ້າຍນ້ອງ, ເພິ່ນສັງເກດເບິ່ງພື້ນທີ່ສະພາບການ

ເປັນແນວໃດນັ້ນ, ເພິ່ນເບິ່ງສະພາບການສັດຕູຫຼາຍຢູ່ນີ້, ເພິ່ນເບິ່ງຄວາມລ້າຫຼັງຂອງປະຊາຊົນບໍ່ທັນເຂົ້າໃຈເຜົ່າມົ້ງ ມັນກໍ່ຍາກ, ເຜົ່າກຸ້ຍເຜົ່າກໍ່ມັນກໍ່ຍາກບໍ່ເຂົ້າໃຈຈັກດີ້, ປົດປ່ອຍໃໝ່ເດກໍ່ຍາກຢູ່ ເພິ່ນວ່າແຕ່ຍາກກະຊິເຮັດ ແນວໃດຂັ້ນເທິງມອບໝາຍໃຫ້ແລ້ວເດ ເພິ່ນຕັດສິນໃຈເຮັດ, ແລ້ວກໍ່ວາງແຜນການທະຫານທັ້ນຢາຍກັນໄປປ້ອມພູລະ 2-3 ຄົນ ໂຟອັນໜຶ່ງໂຟນີ 30 ໜ່ວຍ ເກືອບບໍ່ພໍຄົນຂອງມັນຫຼາຍປ້ອມພູເດ 30-40 ປ້ອມພູພຸ້ນ, ຈັກໃຫຍ່ຈັກນ້ອຍລຸງບຸນຕັ່ງຢູ່ທາງກາງ ຢາຍໝົດແຕ່ລະຈຸດເພິ່ນບອກວ່າ: "ພວກເຈົ້າລາຍງານ ເດີຍ່າພ້າວຕີມັນ: ໜຶ່ງແລະແມ່ນໃຫ້ຊອກບ່ອນຢູ່ມັນ. ທີ່ຕັ້ງມັນອາໄສຢູ່ໃສ, ຢູ່ໄຮ່ຢູ່ສວນໃດ, ບ້ານໃດຍັງລ້ຽງເຂົ້າມັນໃຫ້ເຈົ້າຊອກເດີ; ຈຸດເບື້ອງນີ້ຄືກັນຄືກັນໝົດ". ຈຳນວນລຸງບຸນຕັ່ງຮູ້ແລ້ວ 500 ຄົນ ເພາະຂັ້ນເທິງແຈ້ງໃຫ້ຮູ້ແລ້ວ, ນີ້ແຕ່ວ່າພວກເພິ່ນຊອກບ່ອນຈຸດມັນຢູ່ຮູ້ລະອຽດແລ້ວຈຶ່ງຕີບາດດຽວ. ເມື່ອພວກເພິ່ນຊອກຮູ້ໝົດທຸກຈຸດແລ້ວ ເພິ່ນສັ່ງຕີແລ້ວ ບາດນີ້ເພິ່ນຮູ້ໝົດບ່ອນຢູ່ກໍ່ຕີໝົດພາບດຽວ ເພິ່ນຕີແຕ່ສາຍ 3ລ່ຽມທອງຄຳ ຮອດກອງພັນທີ2 ກອງພັນທີ1 ຢູ່ເມືອງສິງ ເມືອງນາຄຳ. ລຸງບຸນຕັ່ງບອກອ້າຍນ້ອງທະຫານຂອງເພິ່ນວ່າ ເຈົ້າລັດໃຫ້ເພິ່ນເດີ ມີປະຕິການແມ້ວຢູ່ຫັ້ນ 500 ຄົນ, ເພິ່ນຈະຕີຢູ່ນີ້ ພວກເຈົ້າສະກັດຢູ່ເສັ້ນທາງດັບສູນມັນຢູ່ຫັ້ນ ເພິ່ນບອກໝົດແລ້ວກໍ່ສັ່ງພວກນີ້ຕີກອງພົນທີ1 ແລະ ກອງພົນທີ 2 ຕີ. ລຸງບຸນຕັ່ງຢູ່ພຸ້ນເດ ກຳລັງຫຼວງເຂົາຍ້າຍໄປຢູ່ພຸ້ນແລ້ວບໍ່ໃຫ້ເຂົາໄປສະກັດເພາະວ່າມັນຊິໂຕນໄປເມືອງຈີນພວກນີ້ ແລະ ລຸງບຸນຕັ່ງໂທໄປສະກັດ ແລະ ເພິ່ນສັ່ງໃຫ້ອ້າຍນ້ອງຕີ, ຕີບ່ອນນັ້ນຄອນໆຕີບ່ອນນີ້, ມັນຢ້ານລຸງບຸນຕັ່ງດັບສູນເດບາດນີ້ ມັນຖອຍໄປເລີຍ, ໝາຍຄວາມວ່າຄ້າຍໃດຈຸດໃດມັນເສຍລັບແລ້ວ ພວກມັນກໍ່ຖອຍໄປເມືອງສິງ ພໍດີກອງພົນທີໜຶ່ງດັບສູນຢູ່ພຸ້ນ ຊຸດທີໜຶ່ງ 40 ຄົນ ດັບສູນຕາຍແລ້ວ ໄດ້ປືນມາ 40 ກວ່າກະບອກ, ຢາອາແດງຂອງຈີນໝົດເວລານັ້ນເຕັມອະຍະ. ລຸງບຸນຕັ່ງ ຮ້ອງມາຫາໝູ່ເຮົາວ່າ: ສະຫາຍເອີຍ! ອ້າຍ ເອີຍ! ໄດ້ແລ້ວເດີ. ເຂົາຖາມລຸງບຸນຕັ່ງວ່າໄດ້ເທົ່າໃດ?.

ລຸງບຸນຕັງກໍ່ຕອບເຂົາວ່າ: ດັບສູນ 40 ຄົນຕາຍ ແລະໄດ້ປືນ 40 ປາຍກວ່າກະບອກແລ້ວ! ພວກລຸງຕັງເວົ້າວ່າ: ໂອດີໆ! ຈິບໆ! ຕີຕໍ່ອີກເດີ ມັນຍັງຊິໂຕນໄປຫັ້ນອີກລຸງບຸນຕັງກໍ່ໄລ່ແຕ່ພີ້ຈົນໝົດຈຸດນັ້ນ, ແຕ່ພູນີ້ລົງຫາພູນັ້ນ ມັນຊິຕາຍເມື່ອຍ, ຍັງໄຄແດ່ແຕ່ມີເຂົ້າປ່ອງປາ, ກະປ່ອງຊີ້ນກິນຢູ່ໃນແອວເພິ່ນ ນີ້ນ້ຳດື່ມ 3 ບີດົງ. ເພິ່ນຊວນວ່າ: ໄປອ້າຍນ້ອງເຮົາໄປມື້ອື່ນຮອດພູນັ້ນ, ມື້ນີ້ຮອດພູນີ້ ໄປຊອກໝົດທຸກເສັ້ນທາງເພື່ອຊິໄປດັບສູນໄດ້ແຕ່ລະພູ, ສ່ວນໜ້ອຍລຸງບຸນຕັງໄດ້ໃຫ້ເຂົາເຈົ້າດັບສູນຢູ່ເມືອງສິງ. ພວກມັນຖອຍໄປພຸ້ນມັນຊິໄປເມືອງຈີນພຸ້ນໜາ ແລະ ບາດສຸດທ້າຍສະຫຼຸບກວດກາ ກໍ່ບໍ່ເຫັນຫຍັງຄວນໄຟກໍ່ບໍ່ເຫັນ, ລາວສູງມັນໄປອັນນັ້ນກໍ່ບໍ່ເຫັນ ອັນນີ້ກໍ່ບໍ່ເຫັນ ບໍ່ເຫັນມັນເຂົ້າບ່ອນນັ້ນບ່ອນນີ້. ບາດລຸງບຸນຕັງໄດ້ລາຍງານໃຫ້ກະຊວງວ່າ: "ສຳເລັດແລ້ວຍັງຢູ່ຮ່ອງຮອຍບໍ່ສາມາດດັບສູນໄດ້ໝົດ,ແຕ່ສ່ວນຫຼາຍແລ້ວແມ່ນໄປໝົດແລ້ວ ມັນໂຕນໝົດແລ້ວເພາະວ່າທາງນັ້ນລາຍງານມາວ່າຊຸດໜຶ່ງທໍ່ນີ້ຄົນ ຊຸດນັ້ນທໍ່ນີ້ຄົນບ່ອນຕີບ່ອນບໍ່ທັນຕີ ເພາະວ່າມັນໄປຫວິດກ່ອນກໍ່ມີບ່ອນອ້າຍນ້ອງສະກັດ". ດຽວນີ້ລຸງສີພອນໂທຫາລຸງຕັງມາອີກວ່າ: "ເຈົ້າຕ້ອງຄັດເລືອກເອົາຜູ້ທີ່ຕາງໜ້າເຜົ່າຕ່າງໆ ທີ່ຢູ່ສາມຫຼຸ່ມທອງຄຳ ແລະ ເຜົ່າແມ້ວຜູ້ທີ່ມີອິດທິພົນສູງກວ່າໝູ່, ເຜົ່າກຸ້ຍເດ ຜູ້ໃດ ມີອິດທິພົນສູງກວ່າໝູ່, ເຜົ່າໄທດຳແລະເຜົ່າຢ້າວເດໃຫ້ເລືອກເອົາຄົບໝົດ". ລຸງບຸນຕັງກຽມໄດ້ 12 ຄົນ ຜູ້ທີ່ມີອິດທິພົນໄປລວມຢູ່ພຸ້ນເພິ່ນໄປສະເຫຼີມສະຫຼອງວັນຊາດຢູ່ວຽງຈັນ ປີ 1980 ໃຫ້ເຂົາໄປເບິ່ງການສະແດງການເມືອງ, ທະຫານ ແລະ ລົດຕັງລົດເກາະໃດ, ເພາະເວລານັ້ນເພິ່ນຊິສະຫຼອງໃຫຍ່. ບະ! ລຸງບຸນຕັງຢາກຮ້າຍໃຫ້ລຸງສີພອນ ເພາະລົມກັນດີໆແລ້ວເພິ່ນພັດໄປນອນຢູ່ໂຮງແຮມຫ້ວຍຊາຍ, ເຊິ່ງແມ່ນສຳນັກແຂວງໃນປັດຈຸບັນນີ້. ລຸງບຸນຕັງວ່າ: ໂຢ່! ສະໜຸກເຂົາດ່າ[57] ເຂົາວ່າລຸງບຸນຕັງ,ບາງຄົນກໍ່ວ່າກະໂຕລຸງຕັງຫັ້ນບໍ ບາງຄົນກໍ່ເວົ້າວ່າ: ບໍ່ແມ່ນດອກ, ຖ້າຂັ້ນເທິງຕ້ອງການເຂົາກະໄປ

---

57 ພວກເຈົ້າກົກເຈົ້າເຫຼົ່າບັນດາເຜົ່າ, 12ຄົນ ທີ່ລຸງຕັງຄັດເລືອກໄດ້ນີ້ປ້ອຍດ່າ ລຸງຕັງເພາະວ່າສີພອນມາຮັບບໍ່ໄດ້, ເຂົາເຈົ້າວ່າຊິເອົາຍົນມາຮັບເມືອວຽງຈັນ.

ເອົາຕີ່ເບາະຍິນຫັ້ນ ອຶດສະບໍຍິນ? ບໍ່ມີບໍຍິນຢູ່ວຽງຈັນ? ອັນນີ້ເຈົ້າພັດຕົວະຂ້ອຍ ເຢັດແມ່ມັນ....ເຂົາເຈົ້າດ່າລຸງບຸນຕັ້ງ. ລຸງບຸນຕັ້ງກໍ່ເວົ້າວ່າ: "ກໍ່ຍອມຍອມແລ້ວ ອີ່ພໍ່ເອີຍເຈົ້າຢ່າຮ້າຍຂ້ອຍເດີ ຂ້ອຍກໍ່ຢູ່ນຳຂັ້ນເທິງຫັ້ນແລ້ວ ເຈົ້າກົກເຈົ້າເຫຼົ່າເອີຍ". ໝູ່ກໍ່ເອົາເງິນໃຫ້ລຸງບຸນຕັ້ງແຕ່ພັນກີບໜຶ່ງຕໍ່ມື້ ພັນໜຶ່ງເວລານັ້ນມັນແພງໃດ! ຢູ່ກິນເຂົາກໍ່ລ້ຽງຊື້ກິນຊື້ຢູ່, ເຂົ້ານ້ຳຊ້ຳປາ, ຄ່ານອນໂຮງແຮມບໍ່ຢູ່ໃນນັ້ນຫັ້ນແລ້ວ, ຖືວ່າຖືກເວລານັ້ນ ໄກ່ໂຕໜຶ່ງກີບໜຶ່ງເວລານັ້ນເງິນກີບໜຶ່ງໄດ້ປະມານ 2 ຫຼື 3 ບາດນີ້ລະ, ເງິນເຮົາຂຶ້ນເງິນບາດລິງ. ສະພາບວຽກງານລຸງບຸນຕັ້ງເວລານັ້ນຖືວ່າສຳເລັດ ລຸງບຸນຕັ້ງກໍ່ໂທຫານາຍພົນຄຳພາຜູ້ຂັບຍົນຕອນນັ້ນ ກໍ່ສ່ຽວລຸງບຸນຕັ້ງ, ໝໍ່ເປັນຜູ້ບັນຊາການພາກເໜືອສ່ຽວ! ຍິນວຽງຈັນຖືວ່າໝົດຖ້ຽວແລ້ວໃດ! ລຸງບຸນຕັ້ງຕອບໝໍ່ວ່າ: "ໂຕກໍ່ຂໍຢູ່ໃນສຳນັກຂອງໂຕຫັ້ນໜາສ່ຽວຄຳພາເອີຍ, ຜູ້ບັນຊາພາກເໜືອນີ້ໜາ ເອົາຍົນມາເອົາແດ່ລຸງຕັ້ງໂທຫາມາຮັບເອົາເຈົ້າກົກ ເຈົ້າເຫຼົ່າພາກສ່ວນກຽມມາເບິ່ງການສະແດງນີ້ ລຸງຕັ້ງເອົາເພິ່ນວ່າໝົດ 12 ທ່ານແລ້ວ, ພັກຢູ່ໂຮງແຮມດຽວນີ້". ທ່ານຄຳພາວ່າ: ໂອ! ລາວກໍ່ໝົດໂມງບິນແລ້ວສ່ຽວເອີຍ! ອ້າວໄປຫາວຽງຈັນກໍ່ບໍ່ໄດ້! ສຸດທ້າຍທ່ານຄຳພາພັດເວົ້າວ່າ ມື້ອື່ນໄດ້ຍິນ! ຢູ່ຫັ້ນລະ! ຢູ່ໂຮງແຮມຫັ້ນລະກ່ອນ! ຖືວ່າພວກລຸງບຸນຕັ້ງກັບ 12 ຄົນ ທີ່ກຽມມາເບິ່ງການສະແດງກໍ່ເລີຍບໍ່ໄດ້ມາຊ້ຳໃນມື້ນັ້ນ. ຖືວ່າລຸງບຸນຕັ້ງຢາກຮ້າຍທ່ານສິພອນແດ່. ລຸງບຸນຕັ້ງຄິດ: "ບາດນີ້ເຮັດແນວໃດເພິ່ນຈຶ່ງຊິກຳຈຸນີ້ໄດ້, ຂອງແນວວ່າຄັດເລືອກພວກເຂົາມານີ້ ກໍ່ຍາກຢູ່ແລ້ວ, ຊ້ຳບໍ່ພໍພັດວ່າຄາຫັ້ນຄານີ້ຢູ່, ຄືວ່າຕົວະເຂົານີ້ລະແບບນີ້ມັນກໍ່ຍາກສຳລັບຜູ້ເຮັດຕົວຈິງຢູ່". ລຸງບຸນຕັ້ງວ່າດຽວນີ້ກໍ່ລືມຢູ່ທີ່ຂັ້ນເທິງຕອບສະ ໜອງໃຫ້ຜ່ານມາຫັ້ນແຕ່ລຸງຕັ້ງກໍ່ຍັງມີສອງໃຈຢູ່, ຫາກວ່າແລ້ວ ປະເທດຊາດໄດ້ສ່ຳນີ້ເພິ່ນກໍ່ດີໃຈ. ແຕ່ຫາກວ່າ, ລຸງບຸນຕັ້ງວ່າ: ໃຫ້ລືມກັບຊັ້ນກັບຕຳແໜ່ງເພິ່ນ 45 ປີ ກັບຜົນງານສູ້ຮົບມາ 10 ກວ່າປີ ໜີປະຈັນບານກັບຫວຽດນາມ ດັ່ງຝຣັ່ງນີ້ ກໍ່ເປັນເດືອນ, 20 ກວ່າຄັ້ງເພິ່ນສູ້ຮົບຢູ່ຫວຽດນາມ, ຢູ່ກວາງຈິ, ດົງຫ່າ, ກຳໂລ້, ກະແຊັນດຸເດືອດທີ່ສຸດ, ແຕ່ສຸດທ້າຍເພິ່ນໄດ້ແຕ່ພົນໂທ, ຊິລືມບໍ ເພິ່ນເຂົ້າການປະຕິວັດ

ແຕ່ປີ 1945 ມາໜີ້ບໍ່ສິນແລ້ວ, ເພິ່ນກໍ່ອາຍໝູ່ເຫັນບໍເພິ່ນໄປປະຊຸມຄັ້ງທີ 7 ເພິ່ນກໍ່ບໍ່ຕິດດາວ ນີ້ແມ່ນແນວຄິດຂອງເພິ່ນຈາກການເລົ່າຕົວຈິງຂອງເພິ່ນ.

ລຸງບຸນຕັງເວົ້າວ່າ: "ອາວດຽວນີ້ຄວາມຮູ້ສຶກຂອງຂ້າພະເຈົ້ານີ້ດ້ານໄລຍະການປະກອບສ່ວນ ນຳພັກນຳລັດຮັບໃຊ້ພັກລັດຮັບໃຊ້ຊາດຮັບໃຊ້ປະຊາຊົນ ໃນໄລຍະ 45 ປີ ມານີ້ ແລະ ຂ້ອຍເອງກໍ່ໄດ້ຮູ້ສຶກດີໃຈບ່ອນວ່າ ໄດ້ປົດປ່ອຍປະເທດຊາດ, ພັກ-ລັດ ຄຸ້ມຄອງປະຊາຊົນເປັນເຈົ້າ, ໂຕນີ້ເຕັມປ່ຽມທີ່ເຂົ້າໃຈດີ ເພິ່ງພໍໃຈທີ່ປະເທດຊາດໄດ້ປົດປ່ອຍສຳເລັດ, ອັນທີສອງກໍ່ແມ່ນວ່ານະໂຍບາຍຂອງພັກ-ລັດເຮົານີ້ ໃນໄລຍະນີ້, ອັນນີ້ເວົ້າຈິງນຳຂັ້ນເທິງ, ສະເພາະຂ້າພະເຈົ້າເອງ ໃນສ່ວນຕົວນີ້ເຫັນດີຫຼາຍ, ຂໍຂອບໜົກຂອບໃຈນຳເພິ່ນຫຼາຍໆ ເຊັ່ນວ່າ: ເລື່ອງວັດຖຸເງິນຄຳໄດ້ຈຳນວນໜຶ່ງ, ຖາມເບິ່ງແລ້ວໝູ່ຄູ່ຜູ້ຍັງບໍ່ທັນໄດ້ຄືເພິ່ນກໍ່ມີ, ແຕ່ກະຊວງປ້ອງກັນຕ່າງປະເທດໄດ້ຊ່ວຍເຫຼືອປານນີ້, ກັບຮູ້ສຶກອັນນີ້ ຍ້ອນໄດ້ສ້າງປະຫວັດສາດໄດ້ເສຍສະຫຼະຊີວິດ ແລະຜົນປະໂຫຍດຂອງຕົນຈຶ່ງວ່າໄດ້ສໍ່ານີ້, ຂັ້ນເທິງຈຶ່ງໄດ້ສະໜອງໃຫ້ສໍ່ານີ້ອັນນີ້ກໍ່ຂໍຂອບໃຈນຳຂັ້ນເທິງ". ຂັ້ນເທິງໃຫ້ ເພິ່ນມີລົດຄັນໜຶ່ງ (ລົດກະຕຽນ) ແລະກໍ່ມີເງິນສາມສິບລ້ານເທົ່ານັ້ນແລ້ວ, ນອກນັ້ນຂັ້ນເທິງກໍ່ບໍ່ທັນໃຫ້ຫຍັງ. ສ່ວນວ່າເຮືອນຂັ້ນເທິງບໍ່ໄດ້ເອົາໃຫ້ເພິ່ນ. ບາດນີ້ເພິ່ນວ່າຄັນປຽບແລ້ວກໍ່ເວົ້າທົ່ວໄປ, ປຽບໃສ່ນະໂຍບາຍຂອງເພື່ອນມິດຫວຽດນາມນີ້, ພວກເຮົານີ້ກໍ່ຍັງບໍ່ທັນເຮັດໄດ້, ຍັງອ່ອນຫຼາຍ, ແຕ່ວ່າປຽບໃສ່ລາວເສດຖະກິດລາວຂູມື້ນີ້ແມ່ນວ່າພໍມີກພໍໃຈແລ້ວ, ບໍ່ມີຫຍັງເຮົາກໍ່ໄຄແດ່ ແຕ່ເພິ່ນວ່າໜ້າເສຍດາຍສະຫາຍອື່ນຍັງບໍ່ທັນໄດ້ຄືເພິ່ນກໍ່ມີ, ອັນນີ້ເພິ່ນວ່າໜ້າເສຍດາຍ. ເພິ່ນຢາກສະເໜີຂຶ້ນ ບ່ອນວ່າໃຫ້ຂັ້ນເທິງ ແລະພັກລັດຄົ້ນຄວ້າຕື່ມອີກຜູ້ອື່ນທັ້ນ, ບໍ່ແມ່ນວ່າເພື່ອແຕ່ສ່ວນຕົວໃດ, ແລະຍັງໝູ່ຄູ່ເພື່ອນມິດເດ ເຂົາກໍ່ເຮັດການປະຕິວັດຄືກັນກັບພວກເຮົາ, ບໍ່ໜ້ອຍກໍ່ຫຼາຍໄດ້ປະກອບໃຫ້ພັກໃຫ້ລັດ, ແຕ່ປານນີ້ກໍ່ຍັງບໍ່ທັນມີຫຍັງ, ບໍ່ມີຮອດເຮືອນຢູ່ກໍ່ມີໂຕນີ້ ແລະ ກໍ່ເປັນໜ້າເສຍດາຍ. ກໍ່ມີແຕ່ທໍ່ນັ້ນແລ້ວທີ່ປະກອບຕື່ມ.

ລຸງບົວເຍີນ ເລທວຽດມວງ

ເຜົ່າຕະລ່ຽງ

(ແຂວງ ເຊກອງ)

ລຸງບົວເຍີນ ເວົ້າແຕ່ເພິ່ນຍັງນ້ອຍຢູ່. ເພິ່ນເອງເກີດເມື່ອວັນທີ 12/6/1928. ຢູ່ບ້ານກາງໂພເມືອງຫ້ວຍອານ ແຂວງກວາງນາມ. ຊື່ພໍ່ໄຮ່, ເວລາເກີດມານີ້ ແມ່ນຊື່ວ່າ ທ້າງມວງ, ຕາມຕະກູນຢູ່ນີ້ເລທວຽດ, ຊື່ຕະກູນຂອງເພິ່ນແມ່ນເລທວຽດມວງ. ເປັນຫຍັງເພິ່ນດຽວນີ້ຈຶ່ງວ່າຊື່ບົວເຍີນ ເລທວຽດມວງ, ກໍ່ຍ້ອນເວລາທີ່ຈັດຕັ້ງແຂວງນີ້, ກໍ່ກະກຽມປະຫວັດທີ່ສະໝັກກຽມເຂົ້າກອງປະຊຸມໃຫຍ່ຄັ້ງທີ III ແລະ ເພິ່ນເອົາຊື່ເດີມເປັນນາມສະກຸນ, ແລະ ເປັນບົວເຍີນ ເລທວຽດມວງ, ເລທວຽດມວງເປັນຊື່ທີ່ເກີດມາ. ເກີດມາອາຍຸໄດ້ 8 ປີ ເພິ່ນໄດ້ຊ່ວຍພໍ່ແມ່ໃນຄອບຄົວ, ຈົນອາຍຸໄດ້ 12 ປີ ພໍ່ຂອງເພິ່ນໄດ້ແອບໃຫ້ໄຖນາ, ເຮັດສວນ. ມາເຖິງອາຍຸ 13 ປີ ລຸງບົວເຍີນ ໄດ້ເຂົ້າໂຮງຮຽນ, ໂຮງຮຽນຂອງຕາແສງ ລະບອບເກົ່າຂອງຝຣັ່ງໃນປະເທດຫວຽດນາມ. ສະໄໝເກົ່າລຸງບົວເຍີນ ຮຽນບໍ່ຈົບປະລິແມ. ປະລິແມນີ້ຖ້າປຽບກັບລະບົບຂອງລາວແມ່ນຈົບຊັ້ນປະຖົມສົມບູນ. ແຕ່ຫັ້ນມາເພິ່ນບໍ່ໄດ້ຮຽນຕໍ່ຍ້ອນຄອບຄົວທຸກຍາກ, ບໍ່ມີເງິນໃຫ້ຄູ ແລະ ຊື້ເຈ້ຍນ້ຳມຶກ, ຍ້ອນແນວນັ້ນຈຶ່ງບໍ່ມີເງື່ອນໄຂຮຽນຕໍ່ອີກ, ເພິ່ນມາຢູ່ເຮືອນ ແລະ ເຮັດວຽກນຳພໍ່ແມ່ເອື້ອຍນ້ອງໃນຄອບຄົວ. ວຽກທີ່ລຸງເຍີນເຮັດກັບພໍ່ແມ່ແມ່ນ ກາງຄືນພາຍເຮືອຫາປາເພື່ອຂາຍ, ໄດ້ເງິນເລັກໆໜ້ອຍໆ ເພື່ອແລກປ່ຽນອາຫານ, ຊື້ເກືອກິນ. ກາງເວັນລຸງບົວເຍີນກັບພໍ່ແມ່ໄປຫາເກັບຜັກໝອກມາຕົ້ມກິນໃນຄອບຄົວ. ໃນເວລານີ້ປະຊາຊົນທົ່ວປະເທດຫວຽດນາມອຶດຢາກບໍ່ມີອັນກິນ, ຍ້ອນແນວນັ້ນປະຊາຊົນຊາວນາຂອງຫວຽດນາມຈຶ່ງລົ້ມຕາຍຫຼາຍ, ຄອບຄົວຂອງລຸງບົວເຍີນໃນໄລຍະໃດໄລຍະໜຶ່ງກໍ່ຂາດເຂີນ, ຈຶ່ງໄດ້ແລ່ນໄປຂໍຢືມເຂົ້ານຳພວກສັກດີນາເກົ່າ, ຢືມໜຶ່ງຖັງເຂົ້າສານ, ເວລາເພິ່ນເກັບກ່ຽວແລ້ວລະມາໃຊ້ນັ້ນ 5 ຖັງ. ຄອບຄົວໃດບໍ່ມີຄວາມສາມາດແມ່ນຕາຍຫິວ

ເວລານັ້ນ. ພໍ່ແມ່ລຸງບົວເຍີນກໍ່ນອນໃນສະພາບການດັ່ງກ່າວ ຈຶ່ງໄປຫາຜັກໜອກມາຕົ້ມກິນ, ມີແຕ່ອາໃສຜັກໜອກ ແລະ ເຄືອມັນດ້າງມາຕົ້ມກິນຈຶ່ງລອດຕາຍໄດ້. ເມື່ອລຸງບົວເຍີນມີອາຍຸໄດ້ 14-15 ປີ ເພິ່ນໄດ້ພາຍເຮືອໄປນຳແມ່, ເພື່ອໄປຂໍຊື້ປານຳພວກຢູ່ທະເລ, ໄດ້ປາແລ້ວນາມອບໃຫ້ຜູ້ຊື້ຢູ່ຕະຫຼາດ, ສ່ວນທຶນຂອງປາແມ່ນມອບໃຫ້ເຈົ້າຂອງເຮືອ, ສ່ວນກຳໄລແມ່ນແບ່ງໃຫ້ຜູ້ຂາຍສ່ວນໜຶ່ງ, ສ່ວນໜຶ່ງແມ່ນເປັນຂອງເພິ່ນ ເພື່ອຊື້ເຂົ້າແລະອາຫານມາລ້ຽງຄອບຄົວ. ເມື່ອລຸງບົວເຍີນອາຍຸໄດ້ 17 ປີ ເພິ່ນໄດ້ໄປເປັນອ້າຍລ້ຽງໃຫ້ເຈົ້າຂອງເຮືອຂົນສິ່ງ ທີ່ໄປຊື້ເຂົ້າຊື້ເກືອແຕ່ກ່ອນມາຂາຍຢູ່ຫ້ວຍອານ. ເຈົ້າຂອງເຮືອຂົນສິ່ງນີ້ແມ່ນຖື ສາດສະໜາກາວດາຍ, ມີຫວຽດກ້າວດາຍ. ໃນເວລາເຮືອດັ່ງກ່າວແລ່ນມາຮອດທະເລແຂວງກວາງນາມ, ລຸງບົວເຍີນໄດ້ຮັບຂ່າວວ່າການລຸກຮື້ຂຶ້ນຍຶດອຳນາດ [58] ຂອງແຂວງກວາງນາມ ໃນວັນທີ 19/8/1945, ເຮືອທີ່ເຮົາໄປນຳນັ້ນຖືກກອງຫຼອນຍຶດອຳນາດ. ຂອງແຂວງກວາງນາມຂຶ້ນນຳເຮືອ ເພື່ອຊອກຫາອາວຸດໃນເຮືອ, ເຂົາສົງໄສວ່າພວກເພິ່ນຂົນອາວຸດແຕ່ໄຊງ່ອນໃຫ້ກາວດາຍມາຫ້ວຍອານ, ພວກເຂົາບໍ່ເຫັນຫຍັງໃນເຮືອ. ຈາກເຮືອເພິ່ນລົງມາຕະຝັ່ງ, ເຈົ້າຂອງເຮືອໂອ້ລົມກັບເພິ່ນ ເພື່ອດູດດຶງເອົາເພິ່ນໃຫ້ໄປເປັນສະມະຊິກຂອງສາດສະໜາກາວດາຍ (ກາວດາຍແມ່ນສາດສະໜາກາວດາຍ). ມັນວ່າບໍ່ໃຫ້ໄປນຳຫວຽດມິນເວລານັ້ນ, ເພິ່ນຕອບວ່າເຮົາໄປຖາມແມ່ສາກ່ອນແລ້ວຈຶ່ງມາຕອບຕາມຫຼັງ.

ເວລານັ້ນອາຍຸເພິ່ນຍັງນ້ອຍຫາກໍ່ຮູ້ຈັກຄວາມ, ພໍ່ແມ່ກໍ່ຮັກແພງເວລານັ້ນ, ຈຸດໜັກກໍ່ແມ່ນແມ່ເພິ່ນຮັກກວ່າ. ເພິ່ນເອງໄລຍະນັ້ນເປັນທ້ອງບິດ, ເຈັບຫຼາຍເດືອນ, ຕີນໂຕມັນຈ່ອຍລົງໝົດ, ຍ່າງບໍ່ໄດ້ຈິນໄດ້ສ່ຳໄປນຳຝາເຮືອນ. ດັ່ງນັ້ນພໍ່ແມ່ຈຶ່ງເອົາໃຈໃສ່ປິ່ນປົວຈົນໃຫຍ່ຂຶ້ນມາ, ແລະ ລຸງບົວເຍີນໃຫຍ່ຂຶ້ນມາພໍ

[58] ກອງຫຼອນແລະທະຫານປ້ອງກັນຕົວເມືອງຂອງຂະບວນຫວຽດມິນ, ເພາະເດືອນ 8 ປີ 1945 ຂະບວນຫວຽດມິນໄດ້ຍຶດອຳນາດທົ່ວປະເທດຫວຽດນາມ.

ໃຊ້ວຽກໄດ້ ພໍ່ເພິ່ນກໍ່ໃຊ້ວຽກໃຊ້ການໄດ້, ແລະ ກໍ່ເຮັດວຽກຊ່ວຍຄອບຄົວຊ່ວຍພໍ່ແມ່, ຈົນຮອດອາຍຸພໍເຂົ້າໂຮງຮຽນຈຶ່ງໄປໂຮງຮຽນ.

ເວລາໃຫຍ່ຂຶ້ນມາພໍຮູ້ຄວາມຄົນແລ້ວ, ພໍ່ແມ່ຂອງລຸງບົວເຢີນ ກໍ່ສັ່ງສອນ, ວ່າເຮັດແນວນີ້ແນວນັ້ນໃຫ້ມັນດີ, ຢູ່ໃນຄອບຄົວເພິ່ນຟັງຄວາມພໍ່ແມ່, ແລະ ບໍ່ໄດ້ໄປເຮຮານຳຜູ້ອື່ນມັນເສຍມາລະຍາດ, ເພິ່ນກໍ່ຟັງພໍ່ແມ່ເວົ້າ. ຕໍ່ສັງຄົມແລະຕໍ່ຄອບຄົວໃນສະໄໝຝຣັ່ງ, ຄົນໄປຫາຄອບຄົວລຸງບົວເຢີນເລື້ອຍໆ, ໝາຍຄວາມວ່າພົວພັນກັບເອື້ອຍລຸງບົວເຢີນຫັ້ນ, ມັນເປັນໝໍຢາ. ຈຸດປະສົງເຂົາວ່າພວກນີ້ແມ່ນພວກປະຕິວັດແນວໃດ?, ແຕ່ວ່າຕໍ່ໜ້າໝູ່ຄູ່ແມ່ນລຸງບົວເຢີນມ່ວນຊື່ນນຳກັນ, ບໍ່ມີການອາລະວາດອີ່ສັງດອກ, ໝາຍຄວາມວ່າເພິ່ນຟັງຄວາມພໍ່ແມ່, ໂດຍສະເພາະພໍ່ແມ່. ພໍ່ຂອງລຸງບົວເຢີນນີ້ ຖືສາດສະໜາດ້າວເຟີດ, ຄືສາດສະໜາຂອງລາວດຽວນີ້ແລະ (ສາດສະໜາພຸດມະຫາຍານ). ພໍ່ໄດ້ສັ່ງສອນການນົບໄຫວ້ຂອງກິນການຄະລຳແນວນັ້ນແນວນີ້. ຂອງກິນນີ້ຄັນບໍ່ທັນໄດ້ໄຫວ້ເພິ່ນບໍ່ໃຫ້ກິນກ່ອນ, ຄັນກິນນີ້ຊິຜິຫັກຄໍ, ພໍ່ເພິ່ນເວົ້າແນວນັ້ນ. ເວລານັ້ນລຸງເຢີນກໍ່ຢາກເດໃຫ່ຍຂຶ້ນມາແລ້ວ. ມີອີ່ສັງໆ, ມີໝາກກ້ວຍມີອີ່ສັງຫຼາຍແນວແລ້ວ, ພໍ່ເພິ່ນບອກເຈົ້າສູໄປກິນກ່ອນ, ຜີຊິຫັກຄໍເຈົ້າ.

ພໍ່ແມ່ຂອງລຸງບົວເຢີນເຮັດສວນກັບເຮັດນາ, ນາຫັ້ນນາແຫ້ງ, ປູກເຂົ້າຈ້າວແລ້ວ. ບາງເທື່ອກໍ່ໃຫ້ເພິ່ນໄຖນາ, ງົວທີ່ເອົາມາໄຖນານັ້ນແມ່ນຢືມເຂົາມາລ້ຽງ, ແຕ່ວ່າລູກມັນກໍ່ປັນກັນ, ແລະ ກໍ່ເອົາໄຖນາແດ່. ເວລາເຈົ້າຂອງງົວມີເຂົ້າຫຼາຍ, ເຂົາເອົາງົວນຳລຸງບົວເຢີນມາຢຽບເຂົ້າໃຫ້ເຂົາ. ນາລຸງບົວເຢີນກໍ່ເຮັດ, ໄຖເພິ່ນກໍ່ໄຖນາ, ນາແຫ້ງຫັ້ນສ່ວນຫຼາຍປູກມັນດ້າງ.

ເວລານັ້ນນ້ອງຂອງລຸງບົວເຢີນຍັງນ້ອຍ, ໃຊ້ການຍັງບໍ່ໄດ້. ກໍ່ມີເທື່ອໜຶ່ງເວລາມັນອຶດຢາກແຮງພໍ່ຂອງລຸງບົວເຢີນຫຼະໂຊ, ໄປຢືມເອົາເຂົ້າສັກດີນາມາຫຼະຫຼູງ, ພໍດີແຕ່ໃຫ້ພໍ່ເພິ່ນກິນ, ໃຫ້ພວກເພິ່ນໜ້ອຍໜຶ່ງ, ໃຫ້ພໍ່ເພິ່ນຫຼາຍ. ກິນບໍ່ອີ່ມລຸງເຢີນ ແລະ ໄປເອົາເຂົ້າຂອງພໍ່ມາກິນ ພໍ່ ແລະ ຕີລຸງບົວເຢີນ, ແນວນັ້ນ. ເວລາເຮັດວຽກເຮັດງານນີ້ລຸງບົວເຢີນເບິ່ງໝົດພໍ່ແມ່ ເພື່ອດູແລພໍ່ແມ່,

ແລະ ເພິ່ນກໍ່ໄດ້ສຶກສາອົບຮົມລຸງບົວເຍີນ. ແຕ່ໃຫຍ່ຂຶ້ນມານີ້ພໍ່ບໍ່ສູ່ຮ້າຍລຸງບົວເຍີນ, ເວລາໃຊ້ວຽກບໍ່ເຮັດນຳພໍ່ນີ້, ພໍ່ຕີລຸງບົວເຍີນ, ເພາະວ່າບ້ານລຸງບົວເຍີນເວລານັ້ນ ມີໝາກກີ້ຕົ້ມແລ້ວ ເອົາໃນມັນໄປຂາຍ. ມີຄ່ຳຄືນໜຶ່ງເດິກແລ້ວໄກ່ຂັນ, ລຸງບົວເຍີນແລະໄປຊື້, ຂອງລຸງບົວເຍີນເວລານັ້ນຢ້ານຜີ. ຢູ່ມ່ຳໆເຮືອນເພິ່ນທັ້ນມັນມີກົກໄຮໃຫຍ່, ເວລາກາງຄືນມື້ວັນສິນ ມັນຖອກຖ້ວຍຖອກພີ່ສັງລຸງບົວເຍີນແລະຢ້ານ, ພໍ່ເພິ່ນໃຫ້ລຸງບົວເຍີນໄປຊື້ໝາກອັນນັ້ນຍາມເດິກທ່ຽງຄືນແລ້ວ, ຄັນບໍ່ໄປກໍ່ບໍ່ໄດ້, ພໍ່ກໍ່ຕີລຸງບົວເຍີນ, ຈຳເປັນໄປແລ້ວເຍີນແລະພິເສດແນວນັ້ນ. ແຕ່ວ່າແມ່ລຸງເພິ່ນນີ້ບໍ່ມີບັນຫາ.

ການນຸ່ງຖືຂອງລຸງບົວເຍີນນີ້ແມ່ນທຸກ, ຊື້ມາແລ້ວປັນກັນ, ອັນໃດຂອງນ້ອງ, ອັນໃດຂອງເອື້ອຍ, ອັນໃດຂອງເພິ່ນເອງ. ໃຜຊື້ໂຕໃດກໍ່ຮັກສາໂຕນັ້ນ, ເພາະວ່າພວກເພິ່ນນີ້ເວລາຢູ່ນຳກັນກໍ່ຫຼາຍຄົນ 6-7 ຄົນ, ສະນັ້ນແບ່ງກັນ, ຂອງໃຜຂອງມັນ. ໃຜໃຊ້ອັນໃດກໍ່ຮັກສາອັນນັ້ນ, ໃຜບໍ່ອານາໄມກໍ່ແລ້ວແຕ່. ການແບ່ງງານ, ຕື່ນເຊົ້າມາແລະເຮັດວຽກໃຜເຮັດວຽກມັນ, ເພາະວ່າພໍ່ແມ່ແບ່ງວຽກໃຫ້ແລ້ວ, ບໍ່ໃຫ້ສົນກັນ, ເຮັດໜ້າທີ່ຂອງໃຜມັນ. ມີແຕ່ເທື່ອໜຶ່ງລຸງເຍີນກິນເຂົ້າຂອງນ້ອງ, ພໍ່ເພິ່ນແລະຕີລຸງບົວເຍີນ, ແຕ່ວ່າລຸງບົວເຍີນກໍ່ຮັກນ້ອງຄືກັນ.

ການຮຽນຂອງລຸງບົວເຍີນກ່ອນຊິຮອດໄລຍະເຂົ້າຮຽນ, ພໍ່ເພິ່ນກໍ່ຊອກວິທີຂໍລາຍງານນຳຄູ, ຄູຢູ່ທັ້ນແລະຄູຫວຽດສອນໜັງສືໃນສະໄໝຝຣັ່ງ. ໄລຍະເຂົ້າຮຽນນີ້ ພໍ່ເພິ່ນກໍ່ຕັກເຕືອນໃຫ້ເອົາໃຈໃສ່ໃນການຮ່ຳຮຽນ, ຄັນໂຕບໍ່ຮຽນໜັງສືບາດໃຫຍ່ມາກໍ່ກົກໜັງສືບໍ່ເປັນຄືນພໍ່ເພິ່ນວ່າ. ຈຶ່ງວ່າລຸງບົວເຍີນເສຍດາຍຮຽນຮອດແຕ່ໂຮງຮຽນປະຖົມ ຈຶ່ງບໍ່ໄດ້ຮຽນຕໍ່, ຍ້ອນວ່າຄອບຄົວພໍ່ແມ່ບໍ່ມີເງື່ອນໄຂ, ບໍ່ມີເງິນຈ່າຍໃຫ້ຄູແຕ່ລະເດືອນ. ສອງມາບໍ່ມີເງິນບໍ່ຊື້ນ້ຳມຶກເຈ້ຍເພື່ອຂຽນ, ຈຳເປັນຕ້ອງໄດ້ຢຸດ, ແລ້ວຈຶ່ງໄດ້ມາເຮັດວຽກຄອບຄົວ, ເຮັດວຽກຊ່ວຍພໍ່ແມ່ຕະຫຼອດ. ຕອນເຮັດວຽກກັບພໍ່ແມ່ແລະມັນມີບັນຫາແລ້ວ, ພວກໄມ້ມືຂອງຝຣັ່ງມັນເຄີຍມາຈັບຄົນ, ລຸງບົວເຍີນບໍ່ເຂົ້າໃຈວ່າລະບອບຝຣັ່ງມາປົກຄອງມັນເຮັດແນວນີ້, ມັນຢາກຄຸ້ມຄອງ, ຖ້າຜູ້ໃດຜູ້ໜຶ່ງຫາກເຮັດຜິດລະບຽບຫຼັກການ

ຂອງມັນກໍ່ມັນຈະຈັບເຂົ້າຄຸກ. ຖ້າເວົ້າໃນແນວທາງສັງຄົມຫຼິ້ນໄພ້, ຫຼິ້ນແສ້ຫຼິ້ນສາວ, ກິນພຸ່ມເຟືອຍບໍ່ຄ່ອຍມີ, ເພາະວ່າບ້ານຂອງລຸງບົວເຍີນມັນໄກຕົວເມືອງ, ແລະ ມັນບໍ່ມີປານໃດແບບນັ້ນ. ຕົນເອງເພິ່ນກໍ່ຖືກຄຸ້ມຄອງຂອງພໍ່ແມ່, ສະນັ້ນຈຶ່ງວ່າມັນບໍ່ໄດ້ເສລີ. ແຕ່ກໍ່ເຫັນໝູ່ຄູ່ຂອງເພິ່ນກໍຕິດຢູ່, ແຕ່ວ່າມັນບໍ່ຕິດກັບໝູ່ປານໃດ, ມີແຕ່ຍຸງດເພິ່ນກັບພວກສັກດີນານີ້. ຖ້າວ່າເຈົ້າຢືມຂອງມັນນີ້, ຢືມໜຶ່ງມາໃຊ້ຫ້າຄັນບໍ່ຄືນມັນແລະເອົາຄົນການຂອງມັນມາຈັບເອົາເຮົາໃສ່ຄຸກ. ມັນບໍ່ແມ່ນໃສ່ຄຸກໜາໃສ່ຄອກ ມັນມີໄມ້ໄຜ່ໜາມັນຫ້າງໃສ່ຂາ. ແຕ່ວ່າແນວຄິດຂອງລຸງບົວເຍີນມີຕໍ່ຄວາມທຸກຍາກໃນຄອບຄົວ, ບໍ່ແມ່ນວ່າລຸງບົວເຍີນຢາກໄປເປັນທະຫານຝຣັ່ງໄດ້ເຄື່ອງງາມແບບນັ້ນແບບນີ້, ບໍ່ແມ່ນແນວນັ້ນ, ບໍ່ຄິດເວລານັ້ນ.

ເວລານັ້ນ ລຸງບົວເຍີນ ກໍ່ທັນປຸ່ງນ ຢູ່ບ່ອນວ່າ, ໄປນຳຂະບວນລຸກຮື້ຂຶ້ນຂອງຂະບວນທອງດມິນແລ້ວ, ຂອງເພິ່ນຍັງຢູ່ທະເລພຸ້ນເວລານັ້ນ. ມາຮອດບ່ອນແລ້ວກໍ່ຂຶ້ນແຕ່ທະເລ ເວລາເດີນທາງເມືອ, ຫົວໜ້າເຮືອຊວນລຸງບົວເຍີນເຂົ້າສາດສະໜາ ຄືເພິ່ນເລົ່າມາຫັ້ນແລ້ວ. ເພິ່ນມາຮອດບ່ອນແລ້ວໄປນຳຂະບວນຂອງໝູ່, ສະມັກເຂົ້າກອງຫຼອນນຳເຂົາຫັ້ນແຫລະ, ພໍ່ຂອງເພິ່ນເວລານັ້ນຍັງບໍ່ທັນຕົກລົງ, ຢູ່ມ່ຳໆນີ້ເພິ່ນກໍ່ບໍ່ໄດ້ເວົ້າຫຍັງ, ໄປກໍໄປພໍ່ເພິ່ນວ່າ: ເພາະວ່າຂະບວນການຂອງຊາວໜຸ່ມມັນຟົດເດືອດເດເວລານັ້ນ, ລຸງບົວເຍີນກໍ່ຄິດຢາກໄປແລ. ສ່ວນເບື້ອງສາດສະໜາກາວດາຍນີ້ເພິ່ນກໍ່ຄິດແລ້ວ, ເພິ່ນເຫັນຂະບວນຂອງທອງດມິນກໍໄປນຳໝູ່, ແລະ ສະເໜີສະໝັກເຂົ້າເປັນທະຫານຢູ່ໃນເມືອງ. ເພິ່ນເປັນກອງຫຼອນປ້ອງກັນຕົວເມືອງ, ເພິ່ນໄປໃນແງ່ນັ້ນພໍ່ເພິ່ນກໍ່ຍັງບໍ່ທັນເວົ້າຫຍັງ.

ເພິ່ນມາຢູ່ນຳກອງຫຼອນ ຢູ່ໃນເມືອງປ້ອງກັນຕົວເມືອງຫັ້ນ, ບາງເທື່ອພໍ່ແມ່ເພິ່ນກໍ່ມາສົ່ງເຂົ້າ ແລະ ຂອງກິນຢູ່, ຊື້ກ້ວຍຊື້ຫຍັງມາສົ່ງ, ແລະ ກໍ່ສຶກສາເພິ່ນວ່າຄັນກະເທີນໄປແລ້ວຕ້ອງໄປເຮັດວຽກນຳໝູ່, ຕ້ອງປະຕິບັດຕາມລະບຽບ

ກົດໝາຍ, ຢ່າສູ່ເຮັດໂລໆເລໆ ອັນນັ້ນພໍ່ເພິ່ນບອກ. ຖືວ່າເພິ່ນເອງເຄື່ອນໄຫວລັບແລ້ວ. ເວລານັ້ນຍຶດອຳນາດແລ້ວ.

ລຸງບົວເຢີນບໍ່ເຄີຍເຂົ້າຮ່ວມການກິນເຫຼົ້າເມົາຢາ, ການມ່ວນການຊື່ນຊຸມແຊວນຳສັງຄົມເພິ່ນເຂົ້າບໍ່ໄດ້. ແຕ່ນ້ອຍມາພໍ່ເພິ່ນຄຸມຢູ່, ເຮັດແນວນັ້ນບໍ່ໄດ້, ເພິ່ນກໍ່ບໍ່ໄດ້ໄປເຮຮານຳໝູ່, ເພິ່ນບໍ່ມັກຮ້ອງລຳທຳເພງ. ເວລາລ້ອງເພງເພິ່ນເຂົ້າທະຫານພີ້, ເພາະວ່າລະບຽບເດ. ພວກເພິ່ນຢ້ານພໍ່ສະນັ້ນພວກເພິ່ນບໍ່ມີແລ້ວແນວຄິດລັກນິກຈິກທໍ່, ມີແຕ່ລຸງບົວເຢີນໃຫຍ່ຂຶ້ນມາລະຫວ່າງ 17-18 ປີ, ມີຜູ້ສາວມັກ, ມີຊູ້, ແຕ່ວ່າເພິ່ນບໍ່ທັນມີໃຈຕິດອີ່ສັງດອກ. ເຂົາຊື້ຢາສູບຢາອີ່ສັງມາໃຫ້ເວລາເພິ່ນຢູ່ນັ້ນ, ເຂົາກໍລິບຫຼີກເຊື່ອງເອົາໃຫ້ເພິ່ນ. ແຕ່ເພິ່ນແລະຕິດນຳໝູ່ຄູ່, ບໍ່ຕິດນຳບັນຫານີ້.

ເວລານັ້ນ ລະແມ່ນວ່າຢູ່ໃນເມືອງລຸງບົວເຢີນຢູ່ນັ້ນມັນໄດ້ປົດປ່ອຍແລ້ວ, ແຕ່ສະໄໝຝຣັ່ງຍັງບໍ່ທັນປົດປ່ອຍ, ເພິ່ນບໍ່ຄິດຢາກເປັນທະຫານຝຣັ່ງ. ເມື່ອເວລາປົດປ່ອຍແລ້ວເພິ່ນໄດ້ເຂົ້າເຮັດນຳກອງຫຼອນປ້ອງກັນຕົວເມືອງ, ເຮັດວຽກນຳກອງຫຼອນ, ເຮັດໜ້າທີ່ກອງຫຼອນທີ່ກອງບັນຊາການໄດ້ມອບໝາຍໃຫ້, ບໍ່ໄດ້ຄິດນຳຝຣັ່ງ. ແຕ່ສະໄໝມັນຍັງຢູ່ເພິ່ນກໍ່ບໍ່ໄດ້ເຮັດຫຍັງນຳຝຣັ່ງ.

ເພື່ອນຂອງລຸງບົວເຢີນ ເວລາຢູ່ນຳກັນແຕ່ສະໄໝ ໄປລ້ຽງງົວລ້ຽງຄວາຍນຳກັນນັ້ນ ມີຈຳນວນໜຶ່ງ, ເວລາເຂົ້າມາເປັນກອງຫຼອນກໍ່ຊວນກັນເຂົ້າຄື: ໜຶ່ງກໍ່ແມ່ນທ້າວບັງ, ສອງມາ ແລະແມ່ນທ້າວແທ້ງ, ທ້າວເບົາ, ໝູ່ຂອງເພິ່ນນີ້ຍັງຈົດຈຳຢູ່, ແຕ່ດຽວນີ້ເພິ່ນບໍ່ຮູ້ແລ້ວ, ຈັກເປັນທະຫານຕາຍແລ້ວຫຼືແນວໃດບໍ່ຈັກ. ແຕ່ສະໄໝເປັນທະຫານນີ້ເພິ່ນ ກໍ່ມີໝູ່ກອງຫຼາຍຄົນຢູ່, ສະໜິດສະໜົມກັນເວລາໄປເຮັດວຽກກອງບັນບັນຊາການ.

ເມື່ອລຸງບົວເຢີນ ໄດ້ຮັບຂໍ້ຕົກລົງຂອງກອງຮ້ອຍທັ້ນ, ເວລານັ້ນເພິ່ນຍັງຢູ່ສະໜາມຮົບ, ເພິ່ນເປັນຕຳຫຼວດສະໜາມຮົບ. ກອງບັນຊາການເອີ້ນເພິ່ນມາ, ລຸລ່ວງເພິ່ນຕາມມະຕິຂອງທ່ານຟາມວັນດົງ, ເວລານັ້ນ ທ່ານຟາມວັນດົງເປັນ

ກຳມະການກົມການເມືອງສູນກາງພັກ ແລະ ຮັບຜິດຊອບບັນດາເຂດກາງ[59]. ເພິ່ນໃຫ້ແຂວງເຮົານີ້ຈັດຕັ້ງກອງໜຶ່ງ ຊຶ່ງເອີ້ນວ່າກອງໂຄສະນາປະກອບອາວຸດ ເພື່ອໄປຊ່ວຍເພື່ອນ, ຊ່ວຍລາວ. ໃນສະໄໝນັ້ນມີຫຼາຍຄົນ. ເມື່ອຮູ້ສຶກສະພາບ ແນວນັ້ນ ແລະ ລຸງບົວເຢີນກໍ່ຂໍອະນຸຍາດເມືອຢາມຄອບຄົວ. ເພິ່ນເມືອຮອດ ເຮືອນແລ້ວ, ເພິ່ນເມືອລາຍງານພໍ່ແມ່ວ່າລູກຊິໄດ້ໄປເຮັດວຽກຕາມການຈັດຕັ້ງ ແລະຂັ້ນເທິງມອບໝາຍ. ທຳອິດແລະແມ່ເພິ່ນບໍ່ຕົກໃຈ. ເພິ່ນແລະເວົ້າວ່າໜ້າທີ່ ຂອງຂັ້ນເທິງມອບໝາຍ ໃຫ້ຈຳເປັນຕ້ອງໄດ້ປະຕິບັດ. ພໍ່ແມ່ເພິ່ນກໍ່ວ່າ: ບໍ່ໄດ້ ຫ້າມ, ໄປກໍ່ໄປ. ສຸດທ້າຍພໍ່ແລະເພິ່ນເວົ້າວ່າ: ຕາມໜ້າທີ່ຂອງລູກນີ້ຂັ້ນເທິງ ມອບໝາຍໃຫ້ແລ້ວກໍ່ເຮັດ. ແຕ່ວ່າແມ່ກັບພໍ່ນີ້ສະເໜີໃຫ້ເຈົ້າແນວນີ້:ໃຫ້ເຈົ້າສ້າງ ຄອບຄົວກ່ອນ, ຄັນເຈົ້າໄປແລ້ວໃຫ້ເອົາເມຍຢູ່ນຳແມ່ນຳພໍ່. ລຸງບົວເຢີນແລະ ຕອບພໍ່ເພິ່ນວ່າ: ບັນຫານີ້ມັນເປັນໄປບໍ່ໄດ້, ຖ້າເຮົາບໍ່ຢູ່ເຮົາເອົາເມຍປ່ອຍໃຫ້ ເຂົາຢູ່ຜູ້ດຽວ ມັນສ້າງຄວາມລຳບາກລຳຄານແກ່ເຂົາ; ດີກວ່າແລະເມື່ອເວ ລາ ລູກກັບມາສາກ່ອນຈຶ່ງແກ້ໄຂບັນຫານີ້. ພໍ່ແມ່ເພິ່ນກໍ່ຮ້ອງໄຫ້ຄືກັນ ເພາະພໍ່ແມ່ ເພິ່ນຢາກໃຫ້ລຸງບົວເຢີນສ້າງຄອບຄົວກ່ອນ,ໃຫ້ມີຄົນຢູ່ນຳເພິ່ນ. ລຸງບົວເຢີນ ກໍ່ຄິດວ່າໄປບໍ່ທັນຮູ້ວ່າຊິໄດ້ກັບມາຫຼືບໍ່. ແຕ່ວ່າລຸງບົວເຢີນກໍ່ເວົ້ານຳພໍ່ແມ່ວ່າ: ດຽວນີ້ມັນເປັນໄປບໍ່ໄດ້, ຖືວ່າບົວເຢີນສະຫຼະຄວາມສຸກ, ແຕ່ວ່າພໍ່ແມ່ຍັງຫ່ວງ ນຳລູກຊາຍຢູ່. ເວລານັ້ນລຸງບົວເຢີນ ອາຍຸ 18 ປີ. ລຸງບົວເຢີນຕອບແມ່ວ່າ ເວລາໃດລູກກັບມາຈຶ່ງສ້າງກໍ່ໄດ້ຄອບຄົວ. ແຕ່ວ່າຈົນເທົ້າດຽວນີ້ພໍ່ແມ່ກໍ່ບໍ່ເຫັນ ໜ້າລູກໃພ້, ບໍ່ມີແລ້ວ, ມີລູກຂອງລາວເອງ[60]. ມີແຕ່ມາຖາມລຸງບົວເຢີນມື້ຊິໄປ, ລູກໃພ້ທາງລາວພໍ່ແມ່ບົວເຢີນກໍ່ບໍ່ເຫັນ, ເພາະວ່າລຸງບົວເຢີນມາແຕ່ສະໄໝຝຣັ່ງ

---

59 ປີ 1947 -1948, ທາງສູນກາງລາວອິດສະຫຼະ,ໂດຍແມ່ນເຈົ້າສະເດັດ ສຸພານຸວົງ ແລະທ່ານ ຄຳໄຕ ສີພັນດອນ ໄດ້ຕົກລົງຊຸນຈິດໝາຍເຖິງທ່ານ ຟາມວັນດົງ ຄະນະນຳສູນ ກາງຫວຽດມິນ ຮັບຜິດຊອບເຂດກາງຫວຽດນາມ, ເພິ່ນໄດ້ຕົກລົງຈັດຕັ້ງກອງໂຄສະນາ ປະກອບອາວຸດ ເຊິ່ງພໍ່ເຖົ້າບົວເຢີນເຂົ້າມາຮ່ວມຊ່ວຍລາວທຳອິດ.

60 ເວລາລຸງບົວເຢີນເລົ່າຄືນຮອດຕອນນີ້ເພິ່ນໄດ້ຄິດເຖິງຄວາມຫ່ວງຂອງພໍ່ແມ່ໃນອະດີດ.

ຄວບຄຸມ. ຕອນເພິ່ນຕາຍກໍ່ບໍ່ຮູ້ເຮົາຢູ່ສະໜາມໃດເວລານັ້ນ? ໃນສະໄໝອາເມລິກາແຊກແຊງທາງໃຕ້, ຈຶ່ງໄດ້ຍິນຂ່າວວ່າພໍ່ເຈົ້າຕາຍແລ້ວ.

ແຕ່ດຽວນີ້ແຕ່ລະບຸນແຕ່ລະເທື່ອບຸນທານ ລຸງບົວເຍີນກໍ່ຍັງໄຫວ້ເຖິງພໍ່ແມ່ເພິ່ນຢູ່ ລຸງບົວເຍີນກໍ່ເຮັດດອກເວລາມີບຸນຕ່າງໆ, ບຸນປີໃໝ່ບຸນພິສັງເພິ່ນກໍ່ໄຫວ້, ແຕ່ວ່າຮູບພໍ່ເພິ່ນບໍ່ມີແລ້ວ. ເວລາເພິ່ນເມືອເພິ່ນກໍ່ໄຫ້ວຢູ່, ຈູດທູບຈູດທຽນ, ຄິດຮອດຢູ່ຂອງພໍ່ແມ່ຕາຍໄດ້ບໍ່ຢູ່.

ຊື່ຂອງລຸງບົວເຍີນ ລະແມ່ນເລທວງດຢູ, ແມ່ລຸງບົວເຍີນ ລະແມ່ນຖ່ອງຖິ່ງຖວງນ. ພໍ່ເພິ່ນເກີດ ປີ 1928 ລຸງບົວເຍີນມາຮອດປີນີ້ກໍ່ແມ່ນ ວັນທີ 14 ເດືອນ 6 ນີ້ກໍ່ແມ່ນ 76 ປີ ວັນທີ່ລຸງບົວເຍີນ: ເວລາເພິ່ນຍັງນ້ອຍຍັງຢູ່ນຳພໍ່ນຳແມ່ ຮອດອາຍຸລະຫວ່າງ 17 ຫຼື 18 ປີ ນີ້ລະເກີດຂະບວນການປະຕິວັດທາງໃຕ້ ເວລາກຳລັງເຮັດລັດຖະປະຫານ, ເພິ່ນກຳລັງໄປເຮັດວຽກຄ້າຂາຍນຳໝູ່, ບໍ່ແມ່ນຄ້າຂາຍດອກເພິ່ນມີເອື້ອຍ, ເຮືອກຳປັ່ນຂົນສິ່ງແຕ່ເຫງອານ ໄປໄຊງ່ອນພໍດີມານຳທາງເຮືອ ກໍ່ມີການລັດຖະປະຫານເດືອນແປດຂຶ້ນ, ເຫດການເກີດຂຶ້ນນີ້ຊິແມ່ນເປັນສິ່ງຊຸກຍູ້ຫຼືບໍ່ເປັນສິ່ງຊຸກຍູ້ບໍ່ຮູ້. ແຕ່ໝູ່ຄູ່ວ່າການປະຕິວັດດຽວນີ້ມັນເກີດຂຶ້ນ ດຽວນີ້ພວກເຮົາໄປກໍ່ເຮັດ, ທະຫານພາເຮັດສາ. ແຕ່ວ່າຢູ່ຫັ້ນມັນມີສອງອັນໄປນຳເຮືອ, ລຸງບົວເຍີນຫັ້ນມີພວກສາດສະໜາເກົາດາຍນີ້ມີທີ່ວໜ້າ.....ປະຊາຊົນຫັ້ນກໍ່ເຂົ້າເປັນສຳມະຊິກຂອງສາດສະໜານີ້, ແຕ່ເພິ່ນກໍ່ບໍ່ເຂົ້າໃຈວ່າສາດສະໜານີ້ມັນເປັນແນວໃດແທ້, ແຕ່ເຂົ້າກໍ່ບໍ່ຮູ້ຊິເບິ່ງກ່ອນສະພາບການ. ເພິ່ນເມືອກໍ່ແມ່ນຂະບວນການຂອງຊາວໜຸ່ມທາງໃຕ້ເວລານັ້ນ, ໃນຂອບເຂດຂອງພວກເພິ່ນຢູ່ໂອ້. ເພິ່ນວ່າບໍ່ແມ່ນ, ພວກນີ້ກໍ່ແມ່ນສາດສະໜາໜຶ່ງ, ແຕ່ວ່າແມ່ນປະຕິວັດແທ້ບໍ? ອັນນີ້ລະແມ່ນປະຊາຊົນທາງໃຕ້ພວກເຮົາໄປຕາມການປະຕິວັດພັກລັດນຳພາ. ພໍດີເພິ່ນມາຮອດບ່ອນເຮືອໃຫຍ່ຈອດ, ເຮືອສິ່ງແລະເກືອແຕ່ໄຊງ່ອນມາຮອດເຫງອານນີ້. ລຸງບົວເຍີນວ່າຢ່າສາແນວນີ້, ຄັນແນວນີ້ເພິ່ນຊິເມືອ ຊິຂໍບໍ່ເຮັດວຽກອີກ, ເມື່ອໄປນຳຂະບວນການຂອງໝູ່ສຸດທ້າຍເວລານັ້ນເພິ່ນກໍ່ເອົາທີບນີ້ກັບຄືນ, ເຈົ້າຂອງເຮືອເພິ່ນກໍ່ໃຫ້ເຂົ້າກະສອບ

ໜຶ່ງ. ມາແຕ່ຫັ້ນກໍ່ພາກັນຢູ່ນຳໝູ່ຊາວໜຸ່ມ, ກໍ່ພາກັນໄປ, ຊວນກັນໄປ. ໄປທຳອິດແມ່ນລຸງບິວເຢີນຢູ່ນຳຂະບວນ ກອງຫຼອນປ້ອງກັນຕົວເມືອງເຫ່ງອານເວລານັ້ນ. ທາງລັດຖະບານແລະການປະຕິວັດຍັງບໍ່ທັນຍຶດອຳນາດໄດ້ສຳເລັດ, ຍັງຢູ່ລຸງບິວເຢີນເພິ່ນກໍ່ປະກອບໄມ້ຄ້ອນອັນໜຶ່ງ, ເສື້ອຊາວໜຸ່ມເພື່ອໄປເຄື່ອນໄຫວຕ້ານກັບສັດຕູຝຣັ່ງ. ຍີ່ປຸ່ນເວລານັ້ນເອົາໄປ. ຕໍ່ມາເພິ່ນໃຫຍ່ຂຶ້ນມາພໍ່ຕູ້ວ່າ: ດຽວນີ້ເຈົ້າໄປຢູ່ນຳກອງກຳລັງກອງທະຫານປ້ອງກັນຕົວເມືອງ, ໝາຍຄວາມວ່າຕຳຫຼວດດຽວນີ້ຢູ່ກໍ່ຢູ່ນຳກັນ. ເຮັດວຽກກໍ່ເຮັດວຽກນຳກັນ. ພໍດີຫຼັງຈາກນີ້ຍີ່ປຸ່ນເຮັດລັດຖະປະຫານ, ລຸງບິວເຢີນກໍ່ຖືກຢູ່ນີ້ໝວດທະຫານປ້ອງກັນຕົວເມືອງນີ້. ທະຫານນີ້ມັນມີການຈັດຕັ້ງ, ມີກອງບັນຊາການມີຄະນະຮັບຜິດ ຊອບຄັກແນ່, ເຂົາວ່າທະຫານຕຳຫຼວດ ຕຳຫຼວດເມືອງຕຳຫຼວດໃນເມືອງ, ບໍ່ແມ່ນຕຳຫຼວດຊື່ໆ, ຕຳຫຼວດໃນເມືອງ ບໍ່ແມ່ນຕຳຫຼວດຈາລະຈອນ.

ແມ່ນກອງປາບປາມຕຳຫຼວດທີ່ປ້ອງກັນເວນຍາມ [61] ພໍດີກັບຝຣັ່ງ. ຝຣັ່ງມາມັນບຸກຊຸມລຶງບິວເຢີນຕີເຂົ້າພາກກາງຫວຽດນາມ. ລຸງບິວເຢີນຜູ້ໜຶ່ງຢູ່ນີ້, ໝວດນີ້ແລະເພິ່ນແຕ່ງຕັ້ງໝວດໜຶ່ງໄປຕີກັບຝຣັ່ງຢູ່ເມືອງດຽວບາງ, ດຽວບາງຢູ່ແຂວງຂອງຫວຽດນາມ. ໝູ່ຂອງລຸງບິວເຢີນກໍເສຍຊີວິດຜູ້ໜຶ່ງ, ໝວດຂອງລຸງບິວເຢີນແນວສູ້ບໍ່ໄຫວ, ແນວວ່າຝຣັ່ງບັກຫຼາຍໆຄົນ.

ຫຼັງຈາກຝຣັ່ງເຮັດລັດຖະປະຫານຍີ່ປຸ່ນນີ້ ກຳລັງພວກລຸງບິວເຢີນຖອຍເມືອຫາແຂວງ. ແຂວງກໍ່ໄລຍະນັ້ນ, ແມ່ນໄລະຍະຍຶດອຳນາດ, ບໍ່ທັນຍຶດອຳນາດໝົດ ແຕ່ວ່າສະພາບການຂອງຫວຽດນາມມີເຖິງເຂດແນວຫຼັງ. ລຸງບິວເຢີນຖືກແຕ່ງຕັ້ງເຂົ້າຢູ່ຕຳຫຼວດສະໜາມຮົບ, ຕຳຫຼວດສະໜາມຮົບແມ່ນໜ້າທີ່ຂອງພວກເພິ່ນ, ມີເທື່ອໜຶ່ງມີສາມສະຫາຍພວກເພິ່ນໄດ້ຊ່ວຍກັນ, ຕຳຫຼວດຂອງພວກນີ້ໄດ້ປາບປາມພວກປະຕິການຂອງທ້ອງຖິ່ນ, ພວກນາຍສິບກອງໝູນໃຫ້

[61] ປີ 1945 ຍີ່ປຸ່ນລັດຖະປະຫານຝຣັ່ງ, ຝຣັ່ງຍອມຍີ່ປຸ່ນ, ແລ້ວປະຊາຊົນຫວຽດນາມລຸກຂຶ້ນຍຶດອຳນາດເລີຍ,ລຸງບິວເຢີນກໍ່ເປັນຕຳຫຼວດຫວຽດມິນຢູ່ປະເທດຫວຽດນາມ ເວລານັ້ນຢູ່ແຂວງກວາງນາມ.

ກັບຝຣັ່ງ ຊື່ວ່າລິບກ່ອນການປະຕິວັດເວລານັ້ນ.ເວລານັ້ນໄລຍະໜຶ່ງຄືຊິໄດ້ປີປາຍນີ້ຢູ່ຕຳຫຼວດສະໜາມຣິບ, ໜ້າທີ່ຂອງພວກເພິ່ນໄລຍະນັ້ນແມ່ນໄປຊອກພວກນັກສືບຂອງຝຣັ່ງ, ມີຕຳຫຼວດເຂົາຜູ້ນີ້ຊິແມ່ນເປັນເອົາໄປ, ໄປປຸ່ນພາກັນໄປແມ່ນເຮັດແນວນີ້ໄລະນັ້ນ. ພວກເພິ່ນເປັນນັກສືບປະຕິວັດໄລຍະນັ້ນ. ອັນນັ້ນໄລຍະໜຶ່ງໃນປະຫວັດຂອງລຸງບົວເຍີນ, ແປດເກົ້າເດືອນເປັນຕຳຫຼວດຢູ່ສະໜາມລິບ, ພວກເຂົາເອີ້ນກໍ່ຕຳຫຼວດສະໜາມລິບ.

ລຸງບົວເຍີນເວລານັ້ນກໍ່ສິບເວລານັ້ນກໍ່ສິບເຈັດສິບແປດປີ. ຫຼັງຈາກສຳເລັດວຽກຢູ່ສະໜາມຣິບແລ້ວ ເພິ່ນເລີຍເວົ້ານຳແມ່ວ່າ ຂ້ອຍຊິໄປນຳການປະຕິວັດ! ແມ່ເພິ່ນວ່າເອີ, ໄປກໍ່ໄປ, ແຕ່ໃຫ້ລູກສ້າງຄອບສ້າງຄົວກ່ອນສາ, ຊອກຫາຄົນໃຫ້ຢູ່, ເຈົ້າບໍ່ຢູ່ກໍ່ຢ່າ, ກໍ່ແມ່ນເມຍ, ແມ່ນຄອບຄົວ ຂອງເຈົ້າຢູ່ນຳພໍ່ນຳແມ່. ເພິ່ນວ່າບໍ່ໄດ້ແລ້ວແມ່ເອີຍ! ສິງຄາມນີ້ ສ້າງເຂົາມາແລ້ວປະເຂົາຢູ່ໃນເຮືອນນຳພໍ່ນຳແມ່ມັນລຳບາກເຂົາ, ຜົວເຂົາບໍ່ຢູ່ເຊົາສາ, ເວລາໃດລູກກັບມາແລ້ວ, ສຳເລັດໜ້າທີ່ກໍ່ຈຶ່ງຊິເອົາ, ພໍດີເດືອນໃດ ເດືອນເຈັດ, ເດືອນເຈັດແມ່ນກອງພັນຕຳຫຼວດຂອງແຂວງ ພວກເພິ່ນກໍ່ແມ່ນໄດ້ມີຄຳສັ່ງໜຶ່ງຂອງສະຫາຍແທງທັດ, ຂອງສະຫາຍຟາມວັນດົງ ໄດ້ຮັບຈົດໝາຍຂອງປະທານຄຳໄຕ ມາສິ່ງໂດຍກົງຢູ່ທາງເຂດຫ້າ ກໍ່ແມ່ນເວລານັ້ນສະຫາຍຟາມວັນດົງນີ້ເປັນກຳມະການ ພັກຄອມມູນິດຫວຽດນາມ, ຮັບຜິດຊອບເຂດກາງ, ຮັບຜິດຊອບເລຂາເຂດກາງ, ລຸງບົວເຍີນລະບໍ່ຮູ້, ເວລານັ້ນແລ້ວໄດ້ຍິນ ໝູ່ເວົ້າວ່າທາງລາວຂໍຄວາມຊ່ວຍເຫຼືອ, ສະພາບຂອງລາວດຽວນີ້ມັນມີຄວາມຫຍຸ້ງບາກ, ດຽວນີ້ຂໍໃຫ້ທາງທວຍດນາມຊ່ວຍເຫຼືອແດ່.

ເດືອນເຈັດ ປີ 1948 ກໍ່ວ່າເດືອນແປດ ເພາະວ່າພວກເພິ່ນເລີ່ມເດືອນເຈັດປີ 1948. ຈັ່ງຊັ້ນລະກອງບັນຊາການພວກເພິ່ນກໍ່ແຈ້ງ. ດຽວນີ້ທາງສູນກາງກໍ່ຄືທາງພັກປະຊາຊົນລາວ ເພິ່ນກໍ່ຮຽກຮ້ອງມີກຳລັງໜຶ່ງຊ່ວຍທາງລັດຖະການປະຕິວັດລາວ. ທາງພວກເພິ່ນນີ້ກໍ່ບໍ່ຮູ້ຄືກັນ. ທຳອິດແມ່ນຂັ້ນເທິງສັ່ງໃຫ້ພວກລຸງບົວເຍີນ ຈັດຕັ້ງໜ່ວຍທະຫານປະກອບອາວຸດໝູ່ໜຶ່ງ, ກໍ່ແມ່ນບັນດາຜູ້

ທີ່ຂຶ້ນຂວາຍກໍ່ສ້າງຮາກຖານການເມືອງ, ພວກເພິ່ນມີຢູ່ເກົ້າຄົນ[62], ຢູ່ໃນເກົ້າຄົນ ມີລຸງບົວເຢີນຜູ້ໜຶ່ງ, ໝວດທະຫານກໍ່ມີຫົວໜ້າໝວດຜູ້ໜຶ່ງ, ພວກເພິ່ນຫົວໜ້າ ໝວດໝູ່ໜຶ່ງ, ຫົວໜ້າກອງໝວດຜູ້ໜຶ່ງ, ແລະ ກໍ່ແມ່ນສະຫາຍຫົວໜ້າການ ເມືອງຜູ້ໜຶ່ງ. ຂັ້ນເທິງມອບໜ້າທີ່ໃຫ້ພວກເພິ່ນວ່າດຽວນີ້ ໜ່ວຍໂຄສະນາປະ ກອບອາວຸດພິເສດ, ໜ້າທີ່ຂອງພວກສະຫາຍແມ່ນຕ້ອງເຄື່ອນຈາກຫວຽດໄປຫາ ຊາຍແດນລາວຫວຽດນາມ, ກໍາລັງໃຫ້ໄດ້ໝໍເຈົ້າລາມ, ຜູ້ນີ້ຢູ່ຫວຽດນາມ. ຊາຍ ແດນຫວຽດນາມ ຢູ່ດາໂລນີແມ່ນເພິ່ນເປັນຜູ້ສຸດ, ມີສິດອໍານາດຢູ່ເຂດນີ້, ກໍາ ອັນນັ້ນບໍ່ໄດ້, ເຫດການຊິບໍ່ມີຄວາມສາມາດເຄື່ອນທັບມາຊ່ວຍໄດ້. ແລ້ວເວລາ ພວກລຸງບົວເຢີນຊິເດີນທາງນັ້ນ, ບ່ອນຈຸດທີ່ພວກເພິ່ນຈາກຫວຽດນາມ ແມ່ນຢູ່ ເມືອງອັນທາງພາກໃຕ້, ເມືອງອັນນັ້ນເພາະວ່າສໍານັກແຂວງ, ກອງທັບທະຫານ ຕໍາຫຼວດພວກເພິ່ນກໍ່ຢູ່ຫັ້ນ, ສໍານັກຂອງພວກເພິ່ນລະແມ່ນແນວນັ້ນ ສະພາບ ມັນ.

ໃຫ້ຍອານນີ້ເມືອງຂອງລຸງບົວເຢີນ, ແຕ່ວ່າເມືອງອັນນີ້ແມ່ນເມືອງທີ່ ພວກເພິ່ນຈາກລຸງຟາມວັນດົງນີ້ ຈັດຕັ້ງພວກເພິ່ນຂຶ້ນນີ້ ເມືອງຕວຽກເຟືອກ. ເວລານັ້ນພວກເພິ່ນບໍ່ໄດ້ເວົ້າວ່າຊິມາທາງນີ້ດອກ ພວກເພິ່ນວ່າກໍາໃຫ້ໄດ້ໝໍເຈົ້າ ລ່າມຂອງຊົນເຜົ່າກະຕູ[63], ຢູ່ຫວຽດນາມນີ້ກ່ອນເພາະວ່າບ່ອນນັ້ນມັນແມ່ນຊາຍ ແດນ, ຊິຍ້າຍມາທາງນີ້ຍ້າຍມາດາກຈຶ່ງຍ້ານອີສັງແລ້ວ, ກໍາໃຫ້ໄດ້ອັນນີ້. ພວກລຸງບົວເຢີນໄດ້ຮັບເຄື່ອງຕ້ອນ, ເພິ່ນເອົາຂອງຕ້ອນບໍ່ຈັກອີ່ສັງແລ້ວ, ນໍາ ຕານ, ນໍາອ້ອຍເຄື່ອງອັນນັ້ນເຄື່ອງອັນນັ້ນເພື່ອເຮັດຂອງຕ້ອນ, ຂອງຕ້ອນເພິ່ນ ບໍ່ຈັກຖືງບໍ່ຈັກຄຸບໍ່ຈັກອີສັງ. ເພິ່ນຊິຖອດຖອນການກໍ່ສ້າງຮາກຖານ. ພວກເພິ່ນ ນີ້ເຄື່ອນມາແຕ່ຕວຽນເຟືອກມາເຫັງທູຢາເມືອງຢາງນີ້ແລະ. ພວກເພິ່ນຢູ່ເມືອງ ຢາງຂອງຫວຽດນາມນີ້ແລ້ວໝົດ ລະຫວ່າງສາມອາທິດປາຍ, ລຸງບົວເຢີນກໍຖືກ

---

62 ໜ່ວຍໂຄສະນາປະກອບອາວຸດ ຂອງແຂວງກວາງນາມ ມາຊ່ວຍລາວຢູ່ແຂວງຕາເວັນອອກ (ເຊກອງປະຈຸບັນ) ທໍາອິດ ປີ 1945 ມີ 9ຄົນ, ໃນນີ້ມີ ລຸງບົວເຢີນ ເວຫວຽດນວງ.

63 ເຈົ້າກົກເຈົ້າລ່າມ ມີອໍານາດສູງສຸດໃນເຂດນີ້ຂອງເຜົ່າກະຕູ.

ຂຶ້ນກ່ອນ, ແຕ່ເວລານັ້ນກຳລັງເຂົາກໍ່ໄປກ່ອນຂັ້ນເທິງມອບໃຫ້ລຸງບິວເຢີນນີ້ເປັນຜູ້ຄຸ້ມຄອງເຄື່ອງຈັກຂອງອີສັງ, ທັງຈ້າງແຮງອີສັງອີກກະທຶກ, ຂອງພວກເພິ່ນໄປເວລານັ້ນບໍ່ມີລົດລາງອີ່ສັງມີແຕ່ໄປ. ລຸງບິວເຢີນກໍ່ບໍ່ທັນຮູ້ດີພາສາເຜົ່າອີສັງໄປເບື້ອງໝອກ ພ່າຍພູ, ພູປະຊາກະຕູ່ ກະຕູພຸ້ນແລ້ວໄປໆ, ໝູ່ກໍ່ໄປໆ, ລຸງບິວເຢີນກໍ່ໄປໆ, ເພິ່ນຄິດວ່າຈັກຊິເປັນຈັ່ງໃດ, ແຕ່ວ່າກໍ່ໄປຕາມການຈັດຕັ້ງມອບໝາຍ. ພໍດີພວກເພິ່ນເຄື່ອນທັບມາຮອດເມືອງຢາງ, ຂອງຫວຽດນາມດຽວນີ້ແລ, ເອົາເຄື່ອງຂອງບໍ່ຈັກນຳອ້ອຍບໍ່ຈັກນຳຕານ ບໍ່ຈັກຂອງຂ້ວນອີ່ສັງບໍ່ຈັກເກືອເຂົ້າເວລານັ້ນກໍ່ຊິໄປບໍ່ຢາກ. ເພາະວ່າເວລານັ້ນມັນເປັນແນວນີ້ພວກເພິ່ນແລກນຳປະຊາຊົນ, ເກືອສອງຖ້ວຍໄດ້ໝູສາມຈັບໂຕໜຶ່ງ, ແຕ່ລຸງບິວເຢີນເວລານັ້ນກໍ່ແມ່ນບໍ່ທຸກບໍ່ສະໜຸກ, ມັນທຸກຢູ່ບ່ອນວ່າໃຫ້ກຳໄດ້ໝໍເຈົ້າລ່າມກະຕູ່. ແຕ່ສະໜຸກແມ່ນວ່າຂັ້ນເທິງກໍ່ສະໜອງຄົບຊຸດ. ເວລານັ້ນປະຊາຊົນນີ້ກໍ່ແມ່ນມີສອງທ່າອ່ຽງ, ທ່າອ່ຽງອັນໜຶ່ງແມ່ນໄປນຳໝໍເຈົ້າກວາງເຈົ້າລ່າມ ເຜົ່າກະຕູ່ຕ້ານເດັດຂາດກັບຝຣັ່ງ, ແຕ່ລາວບໍ່ເຂົ້າໃຈກັບຫວຽດນາມ [64] . ແປວ່າລາວຫັ້ນໄປແນວນັ້ນ,ລຸງບິວເຢີນກໍ່ໄປຂົນຂວາຍແນວນັ້ນໃຫ້ລາວເຂົ້າໃຈກັບຫວຽດນາມ.

ພວກລຸງບິວເຢີນຢູ່ຫັ້ນເຄື່ອນໄຫວຢູ່ຫັ້ນ, ມີອີ່ສັງກໍ່ແລກປ່ຽນ, ເຂົາຕ້ອງການອີສັງມາແລກປ່ຽນ, ເຂົ້າມາແລກປ່ຽນກໍ່ບໍ່ແມ່ນເຂົາຊິເຊື່ອພັ້ນ. ເຂົາເອົາໄກ່ມາແລກປ່ຽນກໍ່ເອົາເກືອໃຫ້ເຂົາ, ເຂົາເອົາອັນນີ້ອັນນັ້ນມາແລກປ່ຽນພວກລຸງບິວເຢີນກໍ່ເອົາເກືອເອົາຕວກໃຫ້ເຂົາ [65] . ແຕ່ວ່າຢາກກວ່າໝູ່ແມ່ນຊິເຮັດແນວໃດຄະນະກອງພວກເຮົານີ້ຊິກຳໃຫ້ໄດ້ໝໍນີ້, ຄັນກຳບໍ່ໄດ້ໝໍນີ້ ພວກລຸງບິວເຢີນ ຈະບໍ່ສຳເລັດ, ເຮັດບໍ່ຫຼ້ອນ ໜ້າທີ່ມັນຍາກບ່ອນນີ້. ລຸງບິວເຢີນໄປມາໄປຫາບ້ານລາວ ເຮືອນລາວກັບຈຸພວກເພິ່ນຢູ່ນີ້ບໍ່ໄກກັນປານໃດ. ຢູ່ຫ້ວຍກັບມານີ້ ໄປກໍ່ບໍ່

---

64 ເຈົ້າກວາງເຈົ້າລ່າມເຜົ່າກະຕູ່ຢູ່ເຂດຊາຍແດນລາວ-ຫວຽດນາມ (ຂຶ້ນກັບຫວຽດນາມ) ເວລານັ້ນແມ່ນນຳພາປະຊາຊົນຕໍ່ຕ້ານກັບຝຣັ່ງ, ແຕ່ພັດບໍ່ນຳຫວຽດມິນ, ສະນັ້ນພວກລຸງບິວເຢີນຈະຕ້ອງຂົນຂວາຍດູດດຶງເອົາລາວ.

65 ພາສາຫວຽດຕວກ-ພາສາລາວວ່າ ກະປິ.

ເຫັນອິສັງກັບບ້ານເຮົາ, ຂອງລາວສິງໄສພວກລຸງບົວເຍີນຊິແມ່ນຄືຝຣັ່ງ, ຄັນແມ່ນອອກຄຳສັ່ງວ່າຕີລະແມ່ນຕີໂລດແລ້ວ. ຈັກຊິເຮັດແນວໃດ, ພວກລຸງບົວເຍີນໄປມາໄປຢູ່ຈັ່ງຊັ້ນ. ຄະນະພວກເພິ່ນເວົ້າວ່າ ໂອ່ຍແນວໃດກໍ່ຢ່າ ພວກເຮົາຊິຊອກວິທີການແກ້ໄຂ. ສຸດທ້າຍພວກເພິ່ນໄດ້ນຳລາວສອງອັນ: ລູກຂອງເຈົ້າລ່າມເປັນລູກຊາຍຍັງນ້ອຍໄປຜ່ານບ່ອນພວກລຸງບົວເຍີນຢູ່, ມັນກໍ່ຫຼຽວເບິ່ງພໍ່ມັນກໍ່ຮ້າຍ, ບາດກັບມາທັນກໍ່ຫຼຽວເບິ່ງ, ພໍດີຢູ່ບ່ອນນອນຫວຽດນາມມັນມີແອ່ນນ້ອຍແລະເຫັນ. ຊິແມ່ນມັນມາກໍ່ເອົາມາເບິ່ງ, ພວກລຸງບົວເຍີນເອີ້ນມັນມາ. ສະຫາຍຫິວໜ້າວ່າ: ກຳພໍ່ມັນບໍ່ໄດ້ກໍ່ກຳລູກມັນ. ສຸດທ້າຍມັນເບິ່ງມັນຕິດກັບພວກລຸງລຸງບົວເຍີນ, ສຸດທ້າຍມາພວກລຸງບົວເຍີນກະເຂົ້າກິນນຳມັນກໍກິນ, ພໍ່ມັນບໍ່ເຫັນດີກໍ່ຢ່າສຸດທ້າຍ ສະຫາຍຫິວໜ້າເຫັນດີຊອກວິທີການໃໝ່, ໄຮ່ລາວຢູ່ໃສໄປຊອກໄຮ່ລາວກ່ອນ. ອ້າຍນ້ອງພວກລຸງບົວເຍີນມີທີ່ໃດ, ລາວບໍ່ຫິວຊາກໍ່ຢ່າພາກັນໄປ, ເບິ່ງທັງໄດ້ເສຍຫຍ້າ, ຮື້ໄຮ່, ທັງລົມທັງຫົວນຳລາວ, ເຮັດຄ່ອຍໆໄປ. ລູກຊາຍຂອງລາວຕິດກັບພວກລຸງບົວເຍີນ, ມັນໄດ້ກິນເຂົ້າກິນນ້ຳມັນກໍ່ມາ, ພໍ່ມັນເລີ້ມປາກນຳພວກລຸງເຍີນຕອນນັ້ນ. ລຸງບົວເຍີນວ່າສະຫາຍຫິວໜ້າ ພວກເຮົາໄດ້ເລີ້ມ. ເວລາເຈົ້າລ່າມມາແຕ່ໄຮ່ ລາວກໍ່ແວ່ບ່ອນພວກລຸງບົວເຍີນ ຂໍກິນນ້ຳ, ເວລາໄປກໍ່ປາກເວົ້ານຳລາວແລ້ວ. ເວລານັ້ນພວກລຸງບົວເຍີນຍັງບໍ່ທັນຮູ້ຄວາມເຜົ່າລາວ, ໄປຊ່ວຍຕັກນ້ຳ, ເຮັດຢູ່ເຮັດກິນຊ່ວຍລາວ, ເຮັດເຮືອນເຮັດຊານ, ເຮັດຄອກໝູຄອກໄກ່ຊ່ວຍລາວ, ພະຍາຍາມເຮັດໃຫ້ລາວເລີຍຕິດນຳພວກລຸງບົວເຍີນ. ແຕ່ຫັ້ນມາພວກລຸງບົວເຍີນກໍ່ໄດ້ໝໍ້ນີ້ແລ້ວກໍຄືຊິມີແຮງແລ້ວ. ລາວລະອອກຄຳສັ່ງກຳໝົດບ້ານຂອບເຂດລາວຢູ່ຫັ້ນ. ຄາວໜຶ່ງລະເວົ້າກັບພໍ່ບ້ານວ່າ ແຕ່ລະຄອບຄົວນີ້ແມ່ນໃຫ້ໝົດບັນຫາ. ແຕ່ວ່ານຳຫຼັງລຸງບົວເຍີນນີ້ຊິເຮັດແນວໃດ ໂຄສະນາແລະໂຄສະນານຳລາວແລ້ວ. ໄດ້ແລ້ວຊິໃຫ້ພໍ່ບ້ານແຕ່ລະບ້ານນັບແຕ່ຕະໂງໄປຫາເມືອງຢາງຫັ້ນ ຊາວກວ່າບ້ານຢູ່ຂອບເຂດຂອງລາວຢູ່ດຽວນີ້. ພວກລຸງບົວເຍີນຊິເລີ້ມຈັດຕັ້ງພິທີການ ເພື່ອໂຄສະນາ: ຂອງວ່າການຕໍ່ສູ້ຕ້ານຝຣັ່ງນີ້ ແມ່ນປະຊາຊົນຫວຽດເທິງກັບຫວຽດລຸ່ມນີ້ແມ່ນ

ອັນດຽວເຮັດແນວໃດ? ລົມນຳລາວ. ລາວວ່ານີ້ແຕ່ກ່ອນລາວຍາກ, ບໍ່ເຂົ້າໃຈ ເຈົ້ານີ້ກັບເພິ່ນເອງນີ້ເປັນອັນໜຶ່ງອັນດຽວກັນຕ້ານຝຣັ່ງ, ດຽວນີ້ພວກເຈົ້າເວົ້າ ແນວນັ້ນລາວກໍ່ເຫັນດີແລ້ວ, ເພາະວ່ານັ້ນເດຫົວໜ້າປົດເມືອງຢາງນີ້ໄປຜູກ ຂາດຝຣັ່ງໃຫ້ໄປປັດກວາດຢູ່ຫັ້ນເດ. ລາວບໍ່ເຮັດໄດ້ອີສັງເດ. ເວລາລາວເມືອ ລາວໄປຕາມປ່າ ໄລ່ມາແຕ່ຕະໂງໄປຫາພຸ້ນຍິງລູກໜ້າໜ້ອງຄາວນັ້ນມາເມືອງ ຢາງ, ພວກລຸງບິວເຢີນເອົາອັນນັ້ນມາເວົ້າລາວເຫັນດີ ເຫັນພ້ອມນຳກັນ. "ເອີ ກໍ່ເປັນມິດຕະພາບນຳກັນສາ: ພວກເຮົານີ້ຫວຽດເທິງກັບຫວຽດລຸ່ມນີ້ ພ້ອມ ສາມັກຄີກັນເພື່ອຕ້ານຝຣັ່ງ, ຊ່ວຍກັບອີຫຼີບໍ່ຊ່ວຍບໍ່ໄດ້ໃດພວກເຈົ້າ". ດຽວນີ້ ພວກລຸງບິວເຢີນວ່າຊິເຮັດແນວໃດ, ເຈົ້າຮູ້ແລ້ວເຮັດແນວໃດບັນດາພໍ່ບ້ານໝົດ ເຂດເຈົ້າຄຸ້ມຄອງດຽວນີ້ຊິໃຫ້ຮູ້ນຳ, ທາງຄະນະພວກລຸງບິວເຢີນວ່າ ເອີຊິຈັດຕັ້ງ ພື້ນທີ່ລວມກັນເພື່ອເຜີຍແຜ່ໂຄສະນາ ຄະນະລຸງບິວເຢີນ. ເວົ້ານຳລາວວ່າ: ດຽວນີ້ທ່ານຊິເຮັດແນວໃດ ເພື່ອຊິຮຽກບັນດານາຍບ້ານ, ບັນດາຄະນະບ້ານ, ບັນດານາຍຂອງໝົດຂອບເຂດທ່ານນີ້ ມາລວມກັນ. ລາວວ່າບໍ່ຍາກ. ແຕ່ວ່າ ແມ່ນອີຫຼີ, ບໍ່ຍາກຄືຄວາມລາວເວົ້າ. ລາວອອກແຈ້ງໃຫ້ອ້າຍນ້ອງສື່ສານຂອງ ລາວ, ແມ່ນສື່ສານຄົນບ້ານຂອງລາວນີ້ໄປສົ່ງຂ່າວໃຫ້ນາຍບ້ານມາມື້ນັ້ນມາມື້ນີ້ ນັດເຂົາມາຄົບຄົນ. ອັນນັ້ນແລ້ວລຸງບິວເຢີນວ່າ ເຮົາມີແຮງແລ້ວ.

ເວລານັ້ນພວກເພິ່ນເຮັດສຳເລັດເບື້ອງຕົ້ນ ໜ້າທີ່ຂອງພວກເພິ່ນ. ຂອງ ວ່າທ່ານສະຫາຍຟາມວັນດົງ ເພິ່ນມອບໜ້າທີ່ໃຫ້ກໍ່ມາບອກມາເວົ້າ. ກໍ່ໄດ້ມີພິທີ ຈັດຕັ້ງຄັກແນ່, ມີນ້ຳມີໃບ, ມີຂອງຕ້ອນຂອງຂ້ອນຄັກແນ່ໃຫ້ຂຶ້ນວ່າ: "ດຽວນີ້ ສະພາບແນວນີ້ພວກເຮົານີ້ຫວຽດນາມລຸ່ມກັບຫວຽດນາມເທິງນີ້ ກໍ່ແມ່ນພາກັນ ຮ່ວມມືສາມັກຄີນຳກັນພ້ອມກັນຕ້ານຝຣັ່ງ, ພວກມັນກົດຂີ່ຂູດຮີດປະຊາຊົນເຮົາ ນີ້. ເຫັນດີພ້ອມນຳກັນພາກັນຮັກສາ ເຮັດເປັນຈິດໜຶ່ງໃຈດຽວນຳກັນ. ເຈົ້າຊ່ວຍ ເຫຼືອການປະຕິວັດ, ພວກເຮົາພ້ອມກັບພວກເຈົ້າ ພ້ອມກັນລະແມ່ນເພື່ອຊ່ວຍ ໃຫ້ການປະຕິວັດຂອງຫວຽດນາມນີ້ໄດ້ໄຊຊະນະເປັນເອກະພາບນຳກັນ". ແຕ່ ຫັ້ນມາວຽກອັນໃດກໍ່ແມ່ນລາວອອກຄຳສັ່ງລະໄປໝົດ. ເລື່ອງຂົນສົ່ງກໍ່ຄືກັນເວ

ລານັ້ນ ລຸງບິວເຢີນຄິດວ່າ ຫວຽດນາມຊິມາຕັ້ງຢູ່ເບື້ອງນັ້ນ ຂອງຊາຍແດນຫວຽດນາມມັນຊິບໍ່ແມ່ນງ່າຍ, ບໍ່ຈັກເກືອຈັກເຂົ້າບໍ່ຈັກອີ່ສັງລະແມ່ນວ່າລາວອອກຄຳສັ່ງວ່າໃຫ້ໄປລຳລຽງກໍ່ໄປໝົດ. ອັນນັ້ນແລ້ວລຸງບິວເຢີນເວົ້າເບື້ອງຕົ້ນຂອງຄວາມຫຍຸ້ງຍາກ. ເວລານັ້ນພວກລຸງບິວເຢີນກໍ່ມີແຮງ, ສະຫາຍຫົວໜ້າພວກເພິ່ນກໍ່ມີແຮງ ສະຫາຍຫົວໜ້າການເມືອງກໍ່ມີແຮງອ້າຍນ້ອງທະຫານຢູ່ໃນໝວດໜຶ່ງຂອງລຸງບິວເຢີນກໍ່ມີແຮງ, ໝູ່ໜຶ່ງຂອງເພິ່ນກໍ່ມີແຮງແລ້ວ. ອັນນັ້ນຍຶກທຳອິດຂອງການເຄື່ອນໄຫວປະຕິວັດຂອງລຸງບິວເຢີນ ແລະ ໝູ່ເພື່ອນຂອງເພິ່ນ.

ຊື່ຜູ້ນັ້ນ: ກວານທົ້ວ ເປັນຫົວໜ້າຄືຄວາມລາວວ່າ ເປັນເຈົ້າກົກເຈົ້າເຫຼົ່າຫັ້ນ ແຕ່ກາຍອີກ, ເຈົ້າກວາງເຈົ້າລ່າມພຸ້ນ, ເຈົ້າກວາງເຈົ້າລ່າມຢູ່ຂອບເຂດບ້ານແມ່ນເຈົ້າກວາງເຈົ້າລາມຂຶ້ນກັບລາວໝົດ, ໝົດຂອບເຂດນັ້ນ ແມ່ນລາວເວົ້າແນວໃດກໍ່ຕ້ອງຟັງ ຄືຊິແມ່ນເຈົ້າເພຍເຈົ້າຫຼວງ ຄັນແມ່ນສັບລາວຄືຊິແມ່ນເຈົ້າກວາງເຈົ້າລ່າມຫັ້ນແລ້ວ. ເຜົ່າກະຕູຫັ້ນ ແມ່ນລາວເດັດຂາດ ຕໍ່ສູ້ກັບຝຣັ່ງ, ບໍ່ຍອມຝຣັ່ງແທ້ໃດ.

ກະຕູຢູ່ເບື້ອງຫວຽດນາມ. ເບື້ອງລາວເຮົາກໍ່ມີກໍ່ພົວພັນນຳກັນ. ກະຕູເບື້ອງລາວກັບກະຕູເບື້ອງຫວຽດນາມພົວພັນນຳກັນ. ນັ້ນແມ່ນຍຶກທຳອິດຂອງພວກລຸງບິວເຢີນ, ແຕ່ຫັ້ນມາພວກລຸງບິວເຢີນຍຶດໄດ້ທີ່ຕັ້ງຢູ່ຫັ້ນ, ແລ້ວກໍ່ສ້າງສຳນັກ, ສ້າງຄ້າຍ. ພວກເພິ່ນກໍ່ເລີ້ມເຄື່ອນໄຫວ, ເຄື່ອນໄຫວລັກສະນະເປີດກວ້າງ, ເຂົາເອີ້ນວ່າລາມອອກ, ຂະບວນລາມອອກກໍໄດ້ໝົດກໍ່ມີແຮງ, ພວກເພິ່ນມີແຮງ ມີກຳລັງມີແຮງລະເວົ້າບ່ອນໝົດ, ບໍ່ມີໃຜຕ້ານພວກເພິ່ນໄດ້. ລາວເວົ້າອີ່ສັງລະແມ່ນປະຊາຊົນຢູ່ຫັ້ນຟັງຄວາມ, ພວກເຮົາເລີ້ມຕັ້ງແລ້ວສຳນັກງານຢູ່ຫັ້ນ, ແລະ ກໍ່ປັບປຸງກຳລັງ ແລະ ກໍ່ຊິລາມມາທາງລາວແລ, ພວກເພິ່ນຂະຫຍາຍຕາມຊາຍແດນເບື້ອງນີ້, ຄັນບໍ່ມີທີ່ຈັ້ງແນວຫຼັ້ງກໍ່ບໍ່ໄດ້ແລ້ວ. ອັນນັ້ນຈັ່ງວ່າມີບ່ອນຈັ້ງ, ຖືວ່າພວກເພິ່ນດີໃຈທີ່ວ່າໄດ້ປະຕິບັດຕາມຄຳແນະນຳຂອງທ່ານນາຍົກຟາມວັນດົງ, ສຳເລັດ. ເວລານັ້ນທ່ານນາຍົກເສຍແລ້ວ. "ເພິ່ນ

ວ່າພວກສະຫາຍບໍ່ສຳເລັດອັນນີ້ຢູ່ພາກກາງ ຂອງພວກເຮົາຊິບໍ່ມີຄວາມສາມາດໄປຊ່ວຍລາວໄດ້ ພວກເຮົາກຳໄດ້ໝໍນີ້ມັນຕ້ານເດັດຂາດກັບຝຣັ່ງນີ້ ພວກເຮົາກໍ່ຈະເຮັດບໍ່ສຳເລັດ".

ພວກລຸງບິວເຢີນຮັບຄຳສັ່ງແມ່ນເດືອນເຈັດ, ເດືອນແປດພວກເພິ່ນເລີ່ມເຄື່ອນໄຫວ, ເດືອນເກົ້າພວກເພິ່ນຮອດຈີກ, ເດືອນສິບ ສິບເອັດ ສິບສອງ ເດືອນໜຶ່ງ ເດືອນສອງ ເດືອນສາມ ເດືອນສີ່ ພວກເພິ່ນຈຶ່ງກຳໄດ້. ແຕ່ເດືອນເຈັດຮອດເດືອນສີ່ ເລີ້ມທຳອິດພວກເພິ່ນເຄື່ອນໄຫວຢູ່ດາກຈຶ່ງມາຮອດຕະຮື່ວກໍ່ເຂົ້າເມືອງດາກຈຶ່ງດຽວນີ້. ແຕ່ເວລານັ້ນມັນງ່າຍແລ້ວ, ພວກເພິ່ນຮູ້ຄວາມແດ່ແລ້ວ, ຄວາມດາກຈຶ່ງ ຄວາມຕະຮື່ວ ຄວາມອ້າຍນ້ອງກະຕູ່ ຄືກັນເພາະວ່າເຄົ້າອັນດຽວ. ຕະຮື່ວເບື້ອງນີ້ກັບກະຕູເບື້ອງນັ້ນອັນດຽວກັນຮູ້ຄວາມ. ຈາກນັ້ນມານີ້, ການເຄື່ອນໄຫວມັນກໍ່ຍາກເວລານັ້ນ, ເພາະວ່າຜົນສະທ້ອນຂອງຝຣັ່ງມັນໃຊ້ໄດ້ພິເສດ, ມັນໃຊ້ທະຫານຫວຽດນາມພີຊີບໍ່ແມ່ນງ່າຍ. ຂຶ້ນມາເບື້ອງຕົ້ນພວກລຸງບິວເຢີນກໍ່ມີຄວາມຫຍຸ້ງຍາກຂະຫຍາຍໃນການໄປແນວນັ້ນແລ້ວ, ເອົາກຳລັງທະຫານໝູ່ໜຶ່ງ ພວກເພິ່ນກຳລັງໜຶ່ງລົງຜ່ານຊາຍແດນລົງມາເບື້ອງຕະຮື່ວນີ້ ບໍ່ຍາກປານໃດ. ແຕ່ມາຮອດດາກຈຶ່ງນີ້ມັນຍາກ ຜູ້ເຖົ້າຜູ້ແກ່ ເດັກນ້ອຍຊາວໜຸ່ມໜີໝົດຢູ່. ຂອງຝຣັ່ງເຂົາໂຄສະນາໃຫ້ເຂົາວ່າແກວນີ້ມີແຂ້ວສໍ່ານີ້ມັນຍາວ, ມັນມາມັນຂ້າຄົນບໍ່ມີທີ່ບ ປະຊາຊົນຢ້ານເຂົາໜີປະບ້ານໄປໝົດ. ພວກລຸງບິວເຢີນຄິດວ່າຈັກຊິເຮັດແນວໃດ, ໃຫ້ພວກເຂົາເຊື່ອວ່າພວກລຸງບິວເຢີນມາຊ່ວຍລາວຕີຝຣັ່ງ ເພາະວ່າມີຄົນດາກຈຶ່ງສະຫາຍບິວຊໍ່ນີ້ຮູ້, ນາຍກອງຢືມນີ້ສ້າງລາວໃຫ້ເປັນນັກສືບ. ໂອ້ຍບໍ່ແມ່ນງ່າຍພວກເພິ່ນມາດາກຈຶ່ງ. ນັກສືບຝຣັ່ງເພິ່ນຊຽນຈົດໝາຍໄປຫານາຍກອງຢືມວ່າແກວຊິມາແລ້ວ. ແຕ່ມານຳຫຼັງນີ້ບໍ່ເວົ້າດອກ, ອັນເກົ່າພຸ້ນແນວນັ້ນ. ແຕ່ວ່າຕໍ່ມານຳຫຼັງກໍ່ເປັນການຮັກແພງກັນ. ກໍ່

ບໍ່ວ່າດອກອັນນັ້ນ. ແຕ່ທຳອິດມັນເປັນແນວນັ້ນປະຫວັດກັນ[66], ພວກເພິ່ນມາໂຄສະນາມາທາງນີ້ບໍ່ເຂົ້າ, ທຳອິດກໍ່ບໍ່ຢາກເຂົ້າປານໃດ. ທຳອິດພວກລຸງບົວເຢີນຢູ່ໃຫ້ເຂົາອະທິບາຍນຳເຂົາ, ໂຄສະນາກ່ຽວກັບວິທີຝຣັ່ງ ຕ້ານຂອງຫວຽດນາມຕ້ານຝຣັ່ງຮ່ວມກັນ, ສາມັກຄີກັນຕ້ານຝຣັ່ງ. ເວລານັ້ນຜູ້ເຖົ້າຜູ້ແກ່ຍັງຢູ່ບ້ານດອກ, ແຕ່ເດັກນ້ອຍໄປໝົດແລ້ວ, ບໍ່ມີດອກ. ມີແຕ່ເຂົ້າບ້ານໜຶ່ງຈຸນັ້ນລະເວົ້າໄປຄ່ອຍໆເວົ້າໄປ, ເຂົາຄືຊິຄິດເຫັນວ່າບ໊ະ! ພວກນີ້ຊິບໍ່ແມ່ນຄືຝຣັ່ງເວົ້າ! ເຂົາມາກິນມາຢູ່ມາເວົ້າອົບຮົມ, ລຸງບົວເຢີນຮູ້ຄວາມກໍ່ບໍ່ຫຼາຍປານໃດ ແລ້ວ, ໄດ້ຄວາມໃດກໍ່ເວົ້າພໍປານນັ້ນແລ້ວ. ເດັກນ້ອຍນີ້ກໍ່ແມ່ນທະຍອຍກັນເຂົ້າ, ເຂົາຄ່ອຍໆເຂົ້າໃຈ, ເຫັນເຂົາທະຍອຍທະຍອຍກັນມາບ້ານແລ້ວ. ພວກລຸງບົວເຢີນກໍ່ເວົ້າໂອ້ລົມນຳເຂົາຄືຊິມີຂ່າວດີ, ປະຊາຊົນນັບແຕ່ຜູ້ໃຫຍ່ເຖົ້າແດ່ ໜຸ່ມແດ່ມາເຕົ້າໂຮມ, ມາແຕ່ງຢູ່ແຕ່ງກິນໃນເຮືອນໃນຊານກໍ່ໄດ້, ເຂົາກໍ່ຢູ່ບ້ານພວກລຸງບົວເຢີນຍ້າຍລົງມາແຕ່ດາກຈຶງ ພວກເພິ່ນຍ້າຍລົງມານີ້ຢູ່ຄ້າຍຕິງແຮນີ້. ຕິງແຮເວລານັ້ນສັດຕູຍັງຢູ່, ໝູ່ລຸງເຢີນກໍ່ບໍ່ຫຼາຍດອກ ມີແຕ່ໝູ່ໜຶ່ງກັບພະນັກງານຂົນຂວາຍຈຳນວນໜຶ່ງ. ເວລານັ້ນພວກສັດຕູເຫັນລຸງບົວເຢີນມັນວ່າແກວໃດມາ. ໂອ່ຍປະຊາຊົນໄດ້ຍິນຂ່າວ. ສັດຕູກໍ່ຢ້ານປົບໜີປະຄ້າຍ, ປະຄວາຍ ປະໝູ ປະໄກ່ ປະເຂົ້າ ປະນາ. ພວກລຸງບົວເຢີນມາຍຶດມາຕີມັນບໍ່ທັນ, ມັນແລ່ນໄປກ່ອນ, ຍຶດແລ້ວມອບໃຫ້ປະຊາຊົນຕິງແຮນີ້. ຂອງຈຸນີ້ມໍ່ໆຄ່ອຍໆ. ເຮັດແຕ່ຫັ້ນມາ, ເລີ້ມແຕ່ຫັ້ນມາພວກເພິ່ນກໍ່ມີຄວາມຫຍຸ້ງຍາກ, ຄວາມຫຍຸ້ງ ຍາກພວກເພິ່ນບ່ອນນີ້: ຍຶດໄດ້ແຕ່ງຕັ້ງແລ້ວ, ກຳໄດ້ເຈົ້າກວາງເຈົ້າລ່າມແລ້ວ ແລະຂະຫຍາຍໄປຫາຊາຍແດນຂອງລາວແລ້ວ ແລະ ພວກເພິ່ນເອົາກຳລັງລົງນີ້ແລ້ວ ໄຊຊະນະຢູ່ຕິງແຮແຫລະ ພວກເພິ່ນໄດ້ເຂົ້າມາຮອດແມ່ນ້ຳຂອງນີ້, ພໍດີໄປໂຊມາອ້າຍນ້ອງກໍ່ດີອົກດີໃຈ, ໄຊຊະນະລະເປີດເຜີຍຕົວ, ມາອາບນ້ຳອາບ

---

66 ພວກລຸງບົວເຢີນເຫັນເຂົ້າປະຊາຊົນຢູ່ຖ້ຽງໄຮ່ບ້ານກະໂດນກໍ່ຢາກກິນເພາະຫຼາຍມື້ແລ້ວບໍ່ໄດ້ກິນເຂົ້າ, ພວກເພິ່ນກໍ່ປຶກສາ ແລ້ວພວກເພິ່ນກໍ່ປັນກັນກິນເຂົ້າ ກິນແລ້ວກໍ່ເອົາເງິນກຸໂຮ ປະໄວ້ໃຫ້ປະຊາຊົນໃຊ້ ກໍ່ຢ່າເພື່ອຄວາມສັດຊື່ຕໍ່ປະຊາຊົນ.

ໃນແມ່ນ້ຳຂອງຫັ້ນ, ກໍ່ພາກັນເວົ້າເອີ ພວກເຮົາໄຊຊະນະແມ່ນ້ຳຂອງນ່າ, ແມ່ນ້ຳຂອງນ່າມາຮອດແມ່ນ້ຳຂອງນີ້ແຫລະ[67], ມາຮອດເຊກອງພວກເພິ່ນເວົ້າແມ່ນ້ຳຂອງ. ແມ່ຂອງລາວລະແມ່ນເຊກອງນີ້ແຫລະ, ມາຮອດນ້ຳນີ້ກໍ່ອາບນ້ຳອາບໃນ, ແລ້ວກໍ່ພາກັນເມືອງ, ເຄື່ອນທັບກັບເມືອ ເຜີຕົວບໍ່ໄດ້. ບາດເມືອນຳທາງສັດຕູສະກັດ, ມັນເຮັດໃຫ້ສະຫາຍຫົວໜ້ານາຍໝໍ ຂອງພວກລຸງບົວເຢີນນີ້ນະຖືກຊອດ, ຢຸກຢາທີ່ຢືດຢູ່ຄ້າຍຕິງແຣນີ້ກໍ່ໝົດສິດ, ຢູ່ຫັ້ນແລ້ວອ້າຍນ້ອງພວກເຮົາຢູ່. ກຳລັງຂອງພວກເພິ່ນແມ່ນມີແຕ່ສະຫາຍຫົວໜ້ານາຍໝໍນີ້ຊອດ. ພວກເພິ່ນກໍ່ແຕກກະຈັດກະຈາຍ, ພວກເພິ່ນແມ່ນລຳບາກນຳສະຫາຍນີ້ແຫລະ. ເພິ່ນບໍ່ເສຍທຳອິດຫັ້ນ, ລາວຊອດກໍ່ພາກັນໄປ, ຫາມໄປ, ໃສ່ຢາໃສ່ຢຸກກໍ່ບໍ່ຢູ່, ແຕ່ອີ່ດູພວກນີ້ລາວວ່າ ອາສາສະໝັກເສຍຊີວິດ, ກຳລັງອັນນີ້ແລ້ວສະຫາຍຢູ່ນີ້, ສະມາຊິກກຳລັງນີ້ອາສາສະໝັກເສຍຊີວິດ, ພວກລຸງບົວເຢີນຫາມໄປມາກະດູກນີ້ເຄັດ, ຊາວໜຸ່ມບ້ານກະສັງກາງນີ້ຫາມໄປຕອນເຊົ້າ, ຕອນແລງກໍ່ຫາມມາບ່ອນເກົ່າ. ຕອນໃໝ່ນີ້ໃໝ່ມາຕອນແລງກໍ່ໄປແຕ່ໝ້ອງເກົ່າ. ເວລານັ້ນແມ່ນນ້ຳໃນກໍ່ບໍ່ມີ, ນ້ຳນີ້ມັນອັ່ງຢູ່ເງີບພູນີ້. ຊ້າງ ຄວາຍ ງົວ ອີ່ສັງແລ້ວລັ່ງລົງມາກິນແຕ່ພວກລຸງບົວເຢີນຕັກເອົາ, ເອົາຢາມາໃສ່ຫັ້ນລະກິນ. ລຸງບົວເຢີນຄິດວ່າບໍ່ແມ່ນຫຍັງດອກ ລຳບາກນຳໝູ່ກໍ່ຫຼາຍນີ້ແລ້ວ. ຜູ້ຖືກຈັບວ່າ: ໂອ້ຍເຊົາສາ, ພວກສະຫາຍຫົວໜ້ານັ້ນເວົ້າເດັດຂາດເອົາໄປມື້ໃດມື້ສຸດທ້າຍ ພວກລຸງບົວເຢີນກໍ່ເວົ້າວ່າ: ດຽວນີ້ພວກເຮົາຊິຊອກບ່ອນປະກັນກໍ່ບໍ່ຮູ້ເດ. ພໍດີຫົວໜ້າເສຍມື້ສຸດທ້າຍມື້ທີ່ເຈັດ, ລາວເສຍພວກລຸງກໍ່ມ້ຽນມັດອຳລາແລ້ວກໍ່ເມືອ, ເມື່ອລົງເມືອເຂົ້າກໍ່ໝົດ[68], ໄປເລາະນີ້ເລະນັ້ນ. ພໍດີພວກເພິ່ນຍັງຈື່ຍັງຈື່ຊິແມ່ນດຽວນີ້ຢູ່ກະເດິງນີ້ແຫລະ.

---

67 ເວລານັ້ນພວກເພິ່ນໄດ້ລົງເຂດຮອດເຂດນ້ຳເຊກອງ-ອາບນ້ຳເຊກອງພວກເພິ່ນຄິດວ່ານ້ຳເຊກອງແມ່ນນ້ຳຂອງ, ຂອງວ່າບໍ່ເຄີຍເຫັນນ້ຳຂອງ.

68 ພວກລຸງບົວເຢີນສະຫຼຸບສະພາບການເຄື່ອນໄຫວຊ່ວຍລາວຢູ່ແຂວງຕາເວັນອອກ (ເມືອງດາກຈຶ່ງ-ກະລຶມ) ແລະ ຫົວໜ້າພວກເພິ່ນຮວາງຕັງ ເມືອລາຍງານໃຫ້ລຸງຟາມວັນດົງ ຢູ່ເມືອງ

ບ້ານນ້ຳເດີງ ຂອງເມືອງລະມາມນີ້ແລ້ວ, ຢູ່ບ້ານກະເດິງ ຢູ່ຖ້ຽງໄຮ່, ບໍ່ແມ່ນຢູ່ບ້ານເພິ່ນດອກ. ພໍດີເຂົາຂົນເຂົ້າຂົນນ້ຳແລ້ວ, ກໍ່ຍັງເຂົ້າຢູ່ໃນຖ້ຽງໄຮ່, ພວກລຸງບົວເຢີນຢາກຊິຕາຍຈັກຊິເຮັດແນວໃດ. ສະຫາຍຫົວໜ້າຂອງລຸງບົວເຢີນວ່າບໍ່ໄດ້, ຊິເຮັດແນວໃດກໍ່ບໍ່ໄດ້, ອຶດເອົາ, ຢ່າໄປເຮັດເດັດຂາດເຫັນເຂົ້າຢູ່ນີ້ແລ້ວກໍ່ຢາກເຂົ້າ. ລຸງບົວເຢີນເວົ້າວ່າຈັກຊິເຮັດແນວໃດປຶກສານຳກັນເບິ່ງດູ, ດຽວນີ້ຊິຕາຍແລ້ວ, ຊັ້ນເມືອກໍ່ບໍ່ຮອດ. ທັງໝົດໝວດໝູ່ໜຶ່ງກັບອ້າຍນ້ອງສາມສີ່ຄົນ ເຈັດແປດຄົນ ກັບຜູ້ໜຶ່ງເສຍ, ອີກສອງຄົນຫາຍຕົວ, ບໍ່ເຫັນຜູ້ໜຶ່ງກໍ່ໜີນຳຫຼັງຄິດວ່າລາວຊິໄປຍອມສັດຕູ. ອ້າຍນ້ອງຢູ່ໃນກອງຂົນຂວາຍພະນັກຊຸດກ່ອນໆ. ບະພວກເພິ່ນຊິປຶກສາກັນແນວໃດ, ຕົກລົງກັນ. ສຸດດີວ່າຄັນບໍ່ເອົາກໍ່ເມືອຮອດ ສ່ຳຫຼັກໜຶ່ງນີ້, ສະໂງ້ນີ້ຊາຍແດນ. ລຸງບົວເຢີນວ່າ: ດຽວນີ້ ຕົກລົງກັນແນວນີ້ໄດ້ບໍ? ເຮັດກໍ່ເພື່ອແບບມີເຫດມີຜົນ ບໍ່ເອົາພວກເຮົາ ກໍ່ຕາຍຫັ້ນແລ້ວ, ປັ້ນເຂົ້າຫັ້ນກິນ ແລະ ກໍ່ສຸດທ້າຍ ກໍ່ປະເງິນໄວ້. ກິນແລ້ວເມືອຮອດແລ້ວ. ແຕ່ຫັ້ນນັບແຕ່ສະຫາຍນັ້ນເສຍຊີວິດເຈັດວັນ, ສິບສອງວັນ ສິບເອັດວັນ ພວກເພິ່ນໄປພົບຢູ່ບ່ອນເຂົ້າບ້ານກະໂດນ, ປັ້ນເຂົ້າຢູ່ຖ້ຽງໄຮ່ກໍ່ກິນ, ກິນແລ້ວປະເງິນນີ້ໃຫ້, ແນວໃດກໍ່ຢ່າວ່າສັດຕູເດີ! ພວກເຮົາບໍ່ແມ່ນຊິລັກເອົາ, ດຽວນີ້ມັນຈຳເປັນໃຫ້ເຂົາໄວ້, ຫາກຈັກເພິ່ນຊິໃຊ້ຫຼືບໍ່. ມາຮອດບ່ອນນີ້ ກໍ່ແມ່ນສະຫາຍຫົວໜ້າ ພວກລຸງບົວເຢີນນີ້ ຫຼົງທາງມາບໍ່ຮອດ, ມີແຕ່ສະຫາຍຫົວໜ້າການເມືອງກັບພວກເພິ່ນມາຈຶ່ງແມ່ນຫຼົງຕາມຫຼົງ, ຫຼົງເຈັດວັນບໍ່ຮອດ, ໄປນີ້ໄປນັ້ນບໍ່ຈັກຢູ່ໃສຢູ່ໃສກໍ່ເລີຍຮອດ. ຮອດ[illegible]ກໍ່ດີໃຈແລ້ວ, ໂອຍສະຫາຍຫົວໜ້າການເມືອງກໍ່ດີໃຈແລ້ວມາຮອດ, ຈັກເພິ່ນລອດຕາຍແນວໃດບໍ່ຮູ້, ຈັກເພິ່ນກິນຢູ່ໃສ, ເວລານັ້ນພວກລຸງບົວເຢີນກິນແຕ່ໝາກໄມ້, ກິນແນວນີ້ກິນແນວນັ້ນ, ຊີ້ນປາເຂົ້າກໍ່ບໍ່ໄດ້ມັນລະເວນ. ພວກເພິ່ນມາສະຫຼຸບວ່າ ຊິເມືອລາຍງານລຸງ ຟາມວັນດົງ ສະພາບການເຄື່ອນໄຫວແບບນີ້ສະພາບແນວນີ້, ເພື່ອໃຫ້ທາງນີ້ມີທິດ

ຢາງທາງຫວຽດນາມ,ແຕ່ຫົວໜ້າໄປຮອດເມືອງ ຢາງກໍ່ລົງອາບນ້ຳ-ຕາຍດີກນ້ຳສາ, ສະພາບກໍ່ບໍ່ຮອດລຸງຟາມວັນດົງ.

ໃຊ້ນຳແລ້ວ. ໝູ່ລຸງບົວເຍີນໄປຮອດເມືອງຢາງຈັກລາວເຮັດແນວໃດ, ອາບນ້ຳລະແມ່ນດີກນ້ຳຕາຍຢູ່ເມືອງຢາງ. ໂອ້ຍຊິບໍ່ເຫັນລາວອີກແລ້ວ. ສະຫາຍຫົວໜ້າກອງຮ້ອຍ ຮອງຕາຍດີກນ້ຳຢູ່ຫັ້ນ. ພໍດີໄດ້ຍິນຂ່າວແນວນັ້ນພວກລຸງບົວເຍີນກໍ່ຕົກໃຈ. ສະຫາຍຫົວໜ້າການເມືອງ ເພິ່ນວ່າໂອ່ຍຊິເຮັດແນວໃດສະພາບແນວນີ້! ຂ່າວກໍ່ບໍ່ຮອດ! ບໍ່ຮອດສະຫາຍນາຍົກຊິເຮັດແນວໃດລາວຕາຍແລ້ວ? ພໍດີພວກເພິ່ນປຶກສາກັນແລ້ວ ກໍ່ໄດ້ສະຫາຍຫົວໜ້າການເມືອງພວກເພິ່ນກໍ່ວ່າ: ສະພາບແນວນັ້ນແລ້ວຫັ້ນ, ມອບກໍ່ສຸດແຕ່ພວກເຮົາ, ປະຫວັດຂອງພວກເຮົາ. ແລ້ວພວກເພິ່ນກໍ່ມາລາຍງານສະພາບອັນນັ້ນແລ້ວກໍ່ສະຫາຍຟາມວັນດີງວ່າໄດ້ແລ້ວທາງພື້ນຖານ, ເພາະວ່າທາງທວງດນາມ ນີ້ບໍ່ມີບັນຫາອີ່ຫຍັງອີກແລ້ວ. ພວກມາກ່ອນຈັ້ງຢູ່ຫັ້ນ, ຕັ້ງທ່າຢູ່ຫັ້ນເພື່ອຂະຫຍາຍໄປລາວນີ້ມັນມີເງື່ອນໄຂເໝາະແລ້ວຈຶ່ງຈັດຕັ້ງເຂດພິເສດ ເຂດອັນນັ້ນເຂົາເອີ້ນວ່າເຂດພິເສດລາວໃຕ້.

ລຸງບົວເຍີນຢູ່ພຸ້ນທວງດນາມ, ແຕ່ວ່າບໍ່ທັນຂະຫຍາຍມາທາງພີ້, ຈັດຕັ້ງເຂດພິເສດຢູ່ບ່ອນຕັ້ງທຳອິດຫັ້ນ, ເອົາສຳນັກງານມາເຮັດ, ເອົາທະຫານມາເຮັດ. ເວລານັ້ນພວກລຸງບົວເຍີນພວກພະນັກງານເກົ່າເຮັດວຽກຂີນຂວາຍຍັງແຕ່ເຈັດຄົນ [69], ເກົ້າຄົນເສຍຜູ້ໜຶ່ງ, ຍອມສັດຕູຜູ້ໜຶ່ງ, ຫາກຈັກຍອມ ຫຼື ບໍ່ຍອມເວົ້ານີ້, ບາງເທື່ອໂທດນຳລາວບຸແຕ່ວ່າ ບາງເທື່ອລາວຕາຍຢູ່ປ່າຢູ່ດົງ. ຈັດຕັ້ງເຂດພິເສດເວລານັ້ນຢູ່ທວງດນາມນີ້ສະຫາຍທາງວຽນຈຶ່ງເກົ່າ, ທາງວຽນຈີນຢາວ, ແຕ່ວ່າຊື່ເພິ່ນຖືກແຕ່ງຕັ້ງໃຫ້ເປັນຫົວໜ້າການເມືອງຢູ່ເຂດພິເສດລາວໃຕ້ອັນນີ້ຈັກແມ່ນໜຶ່ງຫົວໜ້າເຂດແດ່. ມາລະຈັ້ງໆຢູ່ຕະໂງດງວນີ້ແຫລະ. ຢູ່ຫັ້ນເວລານັ້ນ ລຸງບົວເຍີນຮູ້ຄວາມເຜົ່າແລ້ວ. ໝູ່ເພິ່ນເຈັບກະເພາະ, ສະຫາຍຢາວວ່າເຈົ້ານີ້ດງວນີ້ຮູ້ເຈົ້ານີ້ຮູ້ ເຈົ້າໄປຊອກເຂົ້າໜຽວໃຫ້ພວກເພິ່ນ. ຢ້າງວ່າໄປໆແລກ

---

69 ພວກລຸງບົວເຍີນສະຫຼຸບສະພາບການເຄື່ອນໄຫວຊ່ວຍລາວ ຢູ່ແຂວງຕາເວັນອອກ (ເມືອງດາກຈຶງ, ເມືອງກະລືມ) ແລະຫົວໜ້າພວກເພິ່ນ, ແມ່ນຮວາງຕັງ ເມືອລາຍງານໃຫ້ລຸງຟາມວັນດົງ ຢູ່ເມືອງຢາງທາງທວງດນາມ, ແຕ່ຫົວໜ້າ ໄປຮອດກໍ່ລົງອາບນ້ຳ ແຕ່ວ່າຕາຍດີກນ້ຳສາຜູ້ໜຶ່ງ, ສະພາບກໍ່ບໍ່ຮອດລຸງຟາມວັນດົງ.

ປຸ່ງນອັນນັ້ນອັນນີ້ໄປ, ແຕ່ວ່າລຸງເຢີນເວລານັ້ນມັນສະບາຍເພິ່ນມີແນ່ລຽງ ແຕ່ລະບ້ານເພິ່ນມີໝົດ, ໄປຮອດໃສກໍ່ເມືອໄດ້ຢູ່ດອກຄັນວ່າເມືອ, ເພິ່ນເມືອຮອດບ້ານໄປຫາເຂົ້າຫານ້ຳ ເມືອມີກໍ່ມີເຂົ້າໜຽວ ໃນທີ່ຂອງລຸງບິວເຢີນນີ້ມີໄຂ່ໄກ່ແດ່ເວລານັ້ນແມ່ນເພິ່ນນີ້ຮູ້ພາສາເຜົ່າກະຕູ່ແລ້ວ, ເພິ່ນນີ້ໄດ້ກັບມາກໍ່ເຮັດໄລຍະໜຶ່ງ, ແມ່ນມາຈັ້ງທ່າໄດ້ຢູ່ຈະໂງ, ແລ້ວເພິ່ນຈັດຕັ້ງບັນດາເຂດ ເຂົ້າເອີ້ນວ່າອັນບັນດາຈຸດເພິ່ນຮັບຮັບປະກັນໃຫ້ບັນດາເຂດ. ທິດໃຕ້ ທິດເໜືອ ທິດຕາເວັນຕົກທິດຕາເວັນອອກ ແຕ່ລະຈຸດກໍ່ມີໝວດໜຶ່ງ, ກອງຮ້ອຍໜຶ່ງ ເພື່ອຮັບຜິດຊອບໃຫ້ແກ່ເຂດເຄື່ອນໄຫວໄປແນວນັ້ນ. ພວກລຸງບິວເຢີນແມ່ນພວກເກົ່າ ນີ້ກໍ່ແມ່ນກາຍເປັນກວ້ານລີ (ຄຸ້ມຄອງ). ກາຍເປັນຜູ້ຊອກກິນຊອກຢູ່ໃຫ້ກຳລັງໄປສືບໄປແລກປຸ່ງນເລື່ອງໝູເລື່ອງໄກ່, ເລື່ອງເຂົ້າ ເລື່ອງນ້ຳແລ້ວ. ເພິ່ນລະຜູ້ໜຶ່ງຢູ່ຫັ້ນແລ. ພໍດີຢູ່ໃນທິດຕະຮີ່ວນີ້ແຫລະ ໝູ່ຂອງເພິ່ນນີ້ແຫລະ, ເພິ່ນນີ້ກໍ່ຜູ້ໜຶ່ງພະນັກງານຂົນຂວາຍ, ພໍດີຖືກສັດຕູປັດກວາດນີ້ຍິງລາວຕາຍ. ຜູ້ຕາຍໝູ່ແທ້ນີ້ແລ້ວ, ເພາະວ່າກິນດິບກິນສຸກນຳກັນລະກໍ່ຕາຍຢູ່ຫັ້ນແຫລະ.

ຊື່ວ່າ: ສະຫາຍຟາມກວຽດ. ຢູ່ໃນຈຳນວນ 9 ຄົນຫັ້ນ. ຕໍ່ໄປພວກນັ້ນກໍ່ຂະຫຍາຍມາມີຜູ້ຊາຍກໍ່ມາເປັນທະຫານນຳພາແຕ່ລະກອງແຕ່ລະໝວດແຕ່ລະໝູ່ ໄປປັດກວາດຕ້ານຝຣັ່ງນີ້ແຫລະ. ອັນນັ້ນສະໄໝນັ້ນ. ອັນນັ້ນລະແມ່ນອະດີດການເຄື່ອນໄຫວຂອງພໍ່ລຸງເຢີນ ຕໍ່ມາມັນໄດ້ມີພື້ນຖານຝ່າຍອິດສະຫຼະກໍ່ຂະຫຍາຍກຳລັງອອກມານີ້, ຈົນຈັດຕັ້ງກອງກຳລັງຂົນຂວາຍ, ກອງຂົນຂວາຍຮາກຖານ ຂົນຂວາຍກໍ່ສ້າງຮາກຖານກຳລັງຂອງອາສາສະໝັກຫວຽດນາມ.

ຢູ່ລາວລຸງບິວເຢີນກໍໄດ້ຢູ່ນີ້ໃນໜ່ວຍໜຶ່ງ ໜ່ວຍພວກລຸງບິວເຢີນມີສີ່ຄົນ: ມີສະຫາຍທິວໜ້າ, ເພິ່ນເປັນຮອງ, ສະຫາຍທິວໜ້າຢູ່ໜ່ວຍລຸງບິວເຢີນກໍ່ແມ່ນຫວຽດນາມເວລານັ້ນ. ຍັງແມ່ນພັກຄອມມຸຍນິດຫວຽດນາມ, ໜ່ວຍພັກຄອມມຸຍນິດ, ສະຫາຍທິວໜ້າເປັນເລຂາໜ່ວຍພັກ, ລຸງບິວເຢີນເປັນຮອງ. ເວລານັ້ນ ພວກເພິ່ນກໍ່ແມ່ນກໍ່ສ້າງຂອບເຂດນີ້ແຫລະ ດາກຈຶ່ງ ຕະຮີ່ວ ແມ່ນໜ່ວຍພວກເພິ່ນ.

ລຸງບົວເຍີນວ່າ: ໃນປີ 47-48 ສະໄໝຝຣັ່ງ, ອູ້ຍໄປໄລ່ໄປລານຫັ້ນມີແຕ່ກຳກັບກອງຫຼອນ, ໄປເຂດກອງຫຼອນ, ໄປຊ່ວຍກອງຫຼອນຊ່ວຍພະນັກງານຂອງທ້ອງຖິ່ນ, ບໍ່ທັນມາເຫັນພະນັກງານປະຈຸບັນນີ້. ການເຄື່ອນໄຫວຂອງລຸງບົວເຍີນເປັນແນວນັ້ນແລ້ວ. ປັກຂວາກປັກຂ້າວແລ້ວກໍ່ພ້ອມກັບທະຫານ, ນີ້ກໍ່ແມ່ນໄປ, ຕ້ານກັບຝຣັ່ງ. ເວລານັ້ນ ເພິ່ນຍັງເປັນໜ່ວຍນ້ອຍແຕ່ວ່າເຂັ້ມງວດພວກເພິ່ນເວລານັ້ນ. ພວກເພິ່ນກໍ່ແຕ່ກ່ອນກະໄດ້ຊື່ກັບປະຊາຊົນເຂັ້ມງວດແທ້ໆ. ທິດຂອງເຂດແມ່ນເຂດພິເສດຕາເວັນອອກ, ພະນັກງານຕ້ອງເຂັ້ມງວດ, ລຸງບົວເຍີນຕ້ອງເຮັດຄືປະຊາຊົນ ອັນນີ້ແລ້ວມັນຕາຍຕົວ [70] ; ຕ້ອງກາຍເປັນປະຊາຊົນ, ຜູ້ໃດຂາວຕ້ອງຕາກແດດໃຫ້ມັນດຳ. ອັນນັ້ນເຂດໃດປະຊາຊົນເຈາະຫູກໍ່ຕ້ອງໄດ້ເຈາະຫູ, ເຂດໃດປະຊາຊົນຈິ່ງຜົມຍາວກໍ່ຕ້ອງໄດ້ຈິ່ງຜົມຍາວດຽວນີ້ເຂັ້ມງວດ. ຄັນບໍ່ເຮັດແນວນັ້ນກໍ່ບໍ່ເປັນ, ເຈົ້າເຂົ້າຫາປະຊາຊົນບໍ່ໄດ້, ກິນກໍ່ກິນນຳປະຊາຊົນ, ຢູ່ກໍ່ຢູ່ນຳປະຊາຊົນ, ເຮັດວຽກກໍ່ເຮັດວຽກນຳປະຊາຊົນ, ປຶກສາຫາລື ກໍປຶກສາຫາລືນຳປະຊາຊົນ. ແຕ່ວ່າກັບພວກອາວພວກເອື້ອຍຮູ້ພວກເພິ່ນມັນບໍ່ແມ່ນຄົນຢູ່ຊົນນະບົດ, ຄົນໃນເມືອງເດ, ທຳອິດນີ້ລຸງບົວເຍີນເນື້ອໜັງກໍ່ຂາວ. ເພິ່ນບັນຊາແນວນັ້ນເດ ຈຳເປັນຕ້ອງໄດ້ປະຕິບັດຕາມຄຳເຫັນຕາມມະຕິຂອງຂັ້ນເທິງ, ຂອງໄຮ່ພວກເພິ່ນຕ້ອງໄດ້ຕາກແດດປິດໝົດເຄື່ອງຕາກແດດຮື້ໄຮ່ນຳເຂົາຈົນດຳລຸງບົວເຍີນດຽວນີ້. ແຕ່ກ່ອນລຸງເຍີນຂາວບໍ່ແມ່ນເພິ່ນດຳ, ແຕ່ດຽວນີ້ເພິ່ນດຳເຂົ້າເອງ. ແຕ່ມັນລຳບາກກວ່າໝູ່ຊີວິດໝູ່ເພິ່ນເວລານັ້ນກິນແບບປະຊາຊົນບໍ່ໄດ້. ກິນນຳປະຊາຊົນບໍ່ໄດ້ມັນເປັນແນວໃດ. ບ່ອນໃດມີສັດປ່າຫຼາຍກວ່າໝູ່ແລ ເຂົາເຮັດຂວາກເຮັດຂ້າວກວາງຟານ, ໄດ້ໝູປ່າອີສັງຈົນມັນເນົ່າ.

ຊົນເຜົ່າຕະຣີວ, ຕະລ່ຽງ. ຊົນເຜົ່າຕະຣີວ ຊົນເຜົ່າຕະລ່ຽງນີ້ແລ້ວໂອ່ຍ! ລຳບາກອິດເມື່ອຍອີກ. ບໍ່ແມ່ນເຂົາບໍ່ຮັກ, ເຂົາຢ້ານແຮງ, ເຂົາສາຍ

---

[70] ຂີ້ເຖົ່າປົນໃສ່ ເຫຼົ້າໄຫ ເມື່ອເຂົາໃສ່ນ້ຳ ແລ້ວດື່ມ ແມ່ນມັນປຸກ (ເມົາ) ເມົາໄວ ທັງຫອມດີ (ຕາມຄວາມເຄີຍຂອງເຜົ່າຕະລ່ຽງ).

ກະບັງສາຍກະຕຸກຢູ່ນີ້ຂອງອັນນັ້ນຢູ່ທີ່ງໄຟ. ເວລາລຸງບົວເຢີນມານີ້ຮັກຢູ່ເປັນພໍ່ເປັນແມ່ເປັນນີ້ ເປັນນັ້ນ, ແຕ່ວ່າພວກເພິ່ນກິນນຳປະຊາຊົນບໍ່ໄດ້, ເພາະເຫັນເຂົາດຶງຊີ້ນແຫ້ງມາໂຕໜອນຕິກລິ້ງຊະໆ, ຕິກລິ້ງພຶບໆ ບັກໃຫຍ່ໆ ລຸງບົວເຢີນວ່າ: ໂອ້ຍເຮັດແນວໃດເດພວກເຮົານີ້.

ຢູ່ໃນຊີ້ນສັດປ່າທີ່ເຂົາເອົາໄວ້ດົນນັ້ນມັນມີໜອນໂຕບັກໃຫຍ່ ບັກໃຫຍ່ກິນບໍ່ໄດ້, ຄັນຜູ້ໃດບໍ່ກິນກໍ່ແມ່ນຖືກມາສຳຫຼວດ. ແນວນັ້ນ; ລຸງບົວເຢີນເຮັດເວລານັ້ນເຂັ້ມງວດແທ້. ທຳອິດກໍ່ບໍ່ກິນນຳປະຊາຊົນ, ໝູ່ຂອງລຸງບົວເຢີນຫຼາຍຄົນເສຍກຳລັງໃຈ. ຫຼາຍຄົນຢູ່ບໍ່ໄດ້ຕິເປັນເຈັບເປັນໄຂ້, ຕ້ອງໄດ້ສົ່ງເມືອພຸ້ນ, ຈຳນວນໜຶ່ງຢູ່ໄດ້ກໍ່ແມ່ນຢູ່. ຄືແນວນັ້ນແລ້ວຊີວິດຂອງລຸງບົວເຢີນຜ່ານຄວາມທຸກຍາກໄປໄປເພື່ອປະຊາຊົນ ເພິ່ນຢູ່ນຳປະຊາຊົນ, ແຕ່ພວກເພິ່ນໄດ້ໄຊຊະນະຢູ່ບ່ອນຢູ່ບ່ອນນີ້, ກໍ່ຕີກັນຢູ່ບ່ອນນີ້. ພວກເພິ່ນຊະນະອັນໃດຢູ່ທີ່ງພຽງພັດກິນໄດ້. ສົມມຸດຕົວຢ່າງຮີດຂອງເຂົາກິນງາຍນີ້, ຫຼັງຈາກວ່າກິນຊີ້ນໝົດແລ້ວກະດູກຫັ້ນເຂົາຕັດ, ຕັດກະດູກແຕ່ລະຕ່ອນໃສ່ໄຫຈິບມັນເນົ່າແລ້ວແນວນັ້ນ. ເນົ່າແລ້ວເຂົາເອົາມາເຂົາຕົ້ມໃຫ້ມັນກ້າມ, ເຝືອນມັນກ້າມ, ເວລານັ້ນເຂົາກໍບໍ່ທັນກິນກັບແປ້ງສາລີ. ທຳອິດລຸງບົວເຢີນຄິດຍາກຊິກິນ, ແຕ່ເພິ່ນຈຳເປັນຕ້ອງໄດ້ກິນລະມັນເຄີຍແລ້ວ, ສຸດທ້າຍນີ້ເພິ່ນຢູ່ນຳເຂົາຫັ້ນໄດ້, ຊິມເອົາຊິມເອົາອີ່ສັງກໍ່ໄດ້ໝົດ, ບໍ່ມີບັນຊາ, ບໍ່ຕີອີ່ສັງໝົດໄດ້ຢູ່ນຳເຂົາ. ສຸດທ້າຍນີ້ເພິ່ນຢູ່ນຳເຂົາກັບເຂົາໃຫ້ເປັນກອງຫຼອນ ພວກລຸງບົວເຢີນກໍ່ເປັນແກນກາງ, ພວກນາຍບ້ານນາຍບອກອີ່ສັງແມ່ນຊິໄດ້ຂະຫຍາຍໄປແລ້ວ, ການປະຕິວັດລາວບໍ່ທັນມີດອກເວລານັ້ນ, ພວກອັນນີ້ແລ້ວຊ່ວຍສ້າງເພິ່ນ, ເຂົາເອີ້ນພວກອາສາສະໝັກເພິ່ນນີ້ວ່າຊ່ຽວຊານ, ກໍ່ບໍ່ທັນແມ່ນອາສາສະໝັກມາເປັນທະຫານກໍ່ຢູ່ນຳແຕ່ໃນບ້ານນີ້. ພວກສະຫາຍນີ້ແຕ່ກ່ອນ ກໍ່ຕ້ອງເລີ່ມພວກນີ້ແລ້ວຊິແລ້ວຊິຂຶ້ນເປັນພະນັກງານການນຳຂັ້ນເມືອງ, ນ້ອຍໜຶ່ງລະມາຢູ່ນຳແຂວງ ແລະ ເລີ່ມແຕ່ຫັ້ນມາ. ແຕ່ຊີວິດຂອງລຸງບົວເຢີນນີ້ລຳບາກອັນໜຶ່ງ ຢູ່ໃນບ່ອນວ່າ ຈັກນຳພີ່ນຳນ້ອງນີ້ຢູ່ບ່ອນກະຕູນີ້ບໍ່ຮູ້, ແຕ່ພີ່ນ້ອງຕະລຸ່ງກັບຕະຣິວ ເຈົ້າເຂົ້າເຮືອນເຂົານີ້ ເຂົາປູ

ສາດທີ່ໃດຜືນຂີ້ຝຸ່ນຫຼືຢູ່ນີ້, ບໍ່ໄດ້ແຕະຕ້ອງ, ຜູ້ໃດແຕະຕ້ອງລະແມ່ນຜິດຮີດ, ຜິດຮີດ, ຄັນເຈົ້າຮູ້ເຈົ້າປັດ, ເຈົ້າກວາດ. ເຈົ້າຄິດວ່າໂອ້ເຈົ້າເປັນພະນັກງານ ຂົນຂວາຍ, ເປັນພະນັກງານແບບຢ່າງແມ່ນບໍ່ໄດ້ຜິດຮີດໂລດ. ເພາະວ່າ ຮີດຄອງຂອງເຂົາແນວນັ້ນ, ເພິ່ນພັດຄ່ອຍໆ, ສຸດທ້າຍທ້າຍຈັ່ງໄດ້ເຮັດ ຄ່ອຍໆ ເຮັດໄປ. ລຸງບົວເຍີນ ວ່າແຕ່ຈັກເບິ່ງສະຫາຍວິຄອນເຂົາ. ບໍ່ໄປທາງນັ້ນ ເຂົາ ໄປທາງນີ້ທຶດຕະຣື່ວ ທຶດກັບດາກຈຶ່ງນີ້ອູ່! ລຳບາກຂະໜາດທາງຮີດໆຄອງໆນີ້ ແລ້ວເຮັດອີ່ສັງກໍ່ຜິດ. ອັນນັ້ນອັນໜຶ່ງ, ອັນທີ່ສອງຮີດຄອງຂອງເຂົາກິນເຫຼົ້າກະ ບຽນປົນຂີ້ເຖົ່າ, ເອົາເຖົ່າມາ, ເອົາເຫຼົ້າກະບຽນມາຖອກເທິງລະກ່ອນຊິເອົາຂີ້ ເຖົ່າປົນ. ຂີ້ເຖົ່ານ້ຳລາຍກໍ່ຖົ່ມລົງຂີ້ເຖົ່າຢູ່ຫັ້ນ, ເພາະວ່າກາງຄືນເຂົານອນຢູ່ໃກ້ ຫັ້ນ. ບ໊ະຈັກຊິເຮັດແນວໃດເປັນຕາອຸກໃຈ, ຄັນບໍ່ກິນຕ້ອງໄປ. ຜີນຮ້າຍອັນນີ້ມີ ຕໍ່ລຸງບົວເຍີນບໍ່ແມ່ນງ່າຍ. ຄັນເຂົາກິນຄວາຍງານນີ້ປີໜຶ່ງນີ້ຊິໄປຂຸດຄົ້ວດເອົາຂີ້ ເຖົ່າ ກ່ອນແລ້ວຈຶ່ງຍັດເຂົ້າ, ຈຶ່ງໃສ່ນ້ຳ. ແຕ່ວ່າເປື້ອນເປິະບໍ່ແມ່ນງ່າຍ. ອັນນີ້ ພວກເພິ່ນກໍ່ລຳບາກເວລານັ້ນ, ຈັກຊິເຮັດແນວໃດ, ຊິແກ້ແນວໃດ. ແຕ່ພວກ ເພິ່ນໄດ້ ໄຊຊະນະຢູ່ບ່ອນວ່າຊາຍໜຸ່ມ ແລະ ພວກເພິ່ນກໍ່ພະຍາຍາມ, ເພິ່ນ ຂົນຂວາຍລະດົມເຂົາ ບໍ່ໃຫ້ໃສ່ຂີ້ເຖົ່າ, ແຕ່ວ່າສະເໜີນຳຄອບຄົວຢ່າຊູ້ປົນຂີ້ ເຖົ່າກັບເຫຼົ້າກິນ. ໂອ້! ຜູ້ເຖົ້າຜູ້ແກ່ນີ້ຂັດຂ້ອງບໍ່ແມ່ນງ່າຍ, ດ່າພວກເພິ່ນອີກກະ ທຶກ: ໂອ້ຍພວກເຈົ້າກໍ່ເຮັດແນວເພິ່ນພາເຮັດແດ່ແມ້. ແຕ່ເຂົາດີກັບພວກລຸງບົວ ເຍີນ ແລະ ພະນັກງານຂົນຂວາຍພວກຊາວໜຸ່ມເຂົາສະໜັບສະໜູນພວກລຸງ ບົວເຍີນກໍ່ກິນ, ສຸດທ້າຍກໍ່ເມົາຄືເກົ່າ, ບໍ່ໃສ່ຂີ້ເຖົ່າກໍ່ເມົາຄືເກົ່າ. ແຕ່ນັ້ນໄດ້ໂຄ ສະນາມາ, "ຈັ່ງໃດພວກເຮົາກິນກໍ່ເມົາ, ພວກເຈົ້າຊິຂັດຂ້ອງອີ່ສັງອີກ. ຈາກນັ້ນ ຜູ້ນີ້ຊີມຜູ້ນັ້ນຊີມຄືຊິແມ່ນແຊບຄືເກົ່າ. ພວກເພິ່ນກໍ່ປົດໄດ້ແອກໂຕນີ້, ບໍ່ແມ່ນ ງ່າຍ. ລຸງບົວເຍີນວ່າ: ເອີຍທົນລຳບາກ, ອັນນັ້ນແລ້ວບັນຫາສະພາບເວລານັ້ນ. ແຕ່ເພິ່ນລະແມ່ນມັນໄດ້ດີ, ເພິ່ນລະແມ່ນເຂົາເຊື່ອຢູ່ໃນບ້ານ, ບ່ອນຈຸດຂອງ ເພິ່ນຢູ່. ຮີດຄອງຂອງເຂົາລະແມ່ນມັນ, ເປັນແນວນີ້, ເວລາເຂົາກິນຄວາຍຢູ່ ກ້ອງລ່າງເຮືອນລະແມ່ນໄປສືບເບິ່ງ, ບໍ່ແມ່ນໃຜກໍ່ສືບໃດ, ມີຜູ້ໃດຜູ້ໜຶ່ງໄປສືບ

ເບິ່ງຈັ່ງຄ່ອຍເຂົ້າໄດ້. ອັນນີ້ເວລາຢູ່ບ້ານກິນຄວາຍແລ້ວ, ກິນທີວຄວາຍແລ້ວ ເຂົາກໍ່ຈັດຕັ້ງເຈົ້າຜູ້ໜຶ່ງເດີໄປນຳຈຸນີ້ໄປສືບ, ເຂົາເຊື່ອເຖິງຂະໜາດນັ້ນ, ເວົ້າບໍ່ໄດ້, ຂອງເຂົາບໍ່ເຊື່ອ, ຄົນເຂົາກໍ່ບໍ່ເຊື່ອ, ຂອງຢ້ານມັນເສຍກ້ອງລ່າງຫັ້ນ, ມັນລາຄາຈັກທໍ່ໃດໂຕຄວາຍຄ້ອງລ່າຫັ້ນ ຫຼືໄປເອົາເວລານັ້ນ ຍັງແມ່ນຊາວໜຸ່ມທີ່ຍັງບໍ່ທັນມີຄອບຄົວ, ເຂົາກໍ່ໄປເອົາເດິກຄືກັນ, ກວດມັນເປັນສາຍເຊື້ອກຂອງເຂົາ. ຄ້ອງລ່າໜ່ວຍໜຶ່ງມັນບໍ່ຈັກທໍ່ໃດຕະກຸນຢູ່. ປີນີ້ບ້ານນີ້ກິນຄວາຍແລ້ວ ເອົາໄປເຊື່ອງປີໜ້າບ້ານໃໝ່ກິນລະເອົາຢູ່ກັບໃນຕະກຸນນັ້ນ, ຕະກຸນອື່ນເອົາບໍ່ໄດ້. ແຕ່ລຸງບົວເຢີນກໍ່ເອົາເຊື່ອງໄວ້ເຂົາກໍ່ຄິດວ່າ ລຸງບົວເຢີນຊິເປັນເຂີຍເຂົາແນວນັ້ນ, ເປັນເຂີຍຢູ່ທ້ອງຖິ່ນນັ້ນສະພາບມັນ. ເປັນແນວນັ້ນຮິດຫັ້ນ".

ລຸງບົວເຢີນເວົ້າບໍ່ແຫລະແມ່ນເຊື່ອຄ້ອງລ່າ. ຄ້ອງລ່າໜຶ່ງໜ່ວຍ ຊາວສາມສິບໂຕຄວາຍໄປເຊື່ອງຫັ້ນ, ເຊື່ອງບໍ່ດີໝູ່ກໍ່ລັກເອົາກໍ່ຍາກ, ຄ້ອງລ່າຢູ່ໃນໃຈກາງຂອງມັນມີຄຳ, ຕອນກາງຄືນເດິກນີ້ຕີມັນດັງໄປສ່ຳໃດ ກໍ່ໄດ້ຍິນສຽງມັນຕຶງໆໆ ໆ .....ໂລດ, ມັນບໍ່ແມ່ນປະໜອກ, ມັນຕັ້ງແມ່ນຄ້ອງລ່າແທ້ໆ [71] , ອັນນັ້ນແລ້ວສະພາບ [72] ບາດຕໍ່ມາຈັກຊິເຮັດແນວໃດ, ລຸງບົວເຢີນກໍ່ຢູ່. ລະກໍ່ມີອັນໜຶ່ງພາຍຫຼັງທີ່ຍຶດອຳນາດແລ້ວ, ທ້ອນກຳລັງແລ້ວເພິ່ນກໍ່ມີສະຫາຍຈຳນວນໜຶ່ງນີ້, ພວກເພິ່ນຢູ່ຈິນຖືກວິໄນຈິດໃສ່ປະຫວັດ, ເພາະວ່າບໍ່ປະຕິບັດ. ລຸງບົວເຢີນຕີກັບແມ່ເຖົ້ານີ້ແຫລະເລີຍຢູ່, ແຕ່ວ່າໄຊກພານພາຍຫຼັງການທັນປຸນ ຄືຊິແມ່ນກົມການເມືອງເຫັນຕໍ່ບັນຫາຊິແມ່ນປະກັນບໍ່ໄດ້, ຢູ່ນີ້ກໍ່ຕັ້ງແຕ່ຫັ້ນເພື່ອຊ່ວຍກັນໃຫ້ມີພື້ນຖານ, ຈຶ່ງຄະດີວິໄນເພິ່ນບໍ່ ໄດ້ເອົາໂທດບໍ່ໄດປະຕິບັດວິໄນ, ຂັ້ນເທິງແຕ່ງຕັ້ງເລຂາຂອງເພິ່ນ ຢູ່ກົມການເມືອງເພິ່ນມາ ບອກວ່າ

---

71 ຄ້ອງລ່າຂອງເຜົ່າຕະລ່ຽງແມ່ນຫຼໍ່ດ້ວຍທອງ,ເປັນວັດຖຸບູຮານສືບທອດກັນມາຕາມຕະກູນໃຜລາວ,ເວລາເຮັດບຸນກິນຄວາຍປະຈຳປີ ແມ່ນຂາດບໍ່ໄດ້ໃນຍາມເດືອນສາມ ເດືອນສີ່ ສາກົນ

72 ປີ 1945 ໄຊຊະນະຖຽນບຽນຟູ, ທະຫານພະນັກງານອາສາສະໝັກຫວຽດນາມກັບເມືອປະເທດ,ແຕ່ລຸງບົວເຢີນທັງສູນກາງລາວ,ໂດຍສະເພາະທັງແຂວງຕາເວັນອອກ-ເມືອງດາກຈຶ່ງບໍ່ໃຫ້ລາວເມືອເພິ່ນຢູ່ລາວເລີຍ, ເອົາເມຍລາວ ເຜົ່າຕະລ່ຽງຢູ່ເມືອງດາກຈຶ່ງ, ເປັນຊ່ຽວຊານຊ່ວຍເມືອງ ແລະ ແຂວງຕາເວັນອອກ.

ບໍ່ເປັນຫຍັງດອກ,ຂອງສະຫາຍກໍ່ຢ່າແລ້ວ, ກິນການເມືອງກໍ່ເຫັນດີ ໃຫ້ສະຫາຍເອົາ, ທຳອິດລຸງບົວເຍີນແມ່ນຢູ່ໜ່ວຍກໍ່ສ້າງຮາກຖານ ຢູ່ຕາແສງ, ຢູ່ຕາແສງລະແມ່ນບັນດາສະຫາຍຢູ່ໃນໜ່ວຍລຸງບົວເຍີນນີ້, ແມ່ນເຂົາຫ້ອນມານີ້ເຂົ້າໜ່ວຍດຽວ. ບັນດາສະຫາຍຂອງເພິ່ນຢູ່ຕາແສງນີ້ ກໍ່ຕິດແພັນນຳກັນ, ປຶກສາຫາລືນຳກັນ ແຕ່ທຳອິດນີ້ເຂົາບໍ່ໃຫ້ ລຸງບົວເຍີນຮ່ວມຊີວິດອາສາສະໝັກແຈ້ງມາເມືອງຊິຮູ້ວ່າສູນກາງຫັ້ນບໍ່ປະຕິບັດວິໄນລຸງບົວເຍີນ. ຂັ້ນເທິງກໍ່ເອີ້ນລຸງບົວເຍີນມາປຶກສາຫາລືຢູ່ຕາແສງ, ປຶກສາຫາລືນຳກັນພາກັນເຮັດ, ຕໍ່ມາລຸງບົວເຍີນກໍ່ເຮັດຢູ່ຕາແສງໄລຍະໜຶ່ງ, ເຮັດເປັນໜ່ວຍສະຫະຕາແສງນີ້, ສາມສີ່ຕາແສງຢູ່ນຳໜ່ວຍ ໂຄສະນາ.

ລຸງບົວເຍີນຢູ່ທຳອິດຫັ້ນແມ່ນຕາແສງອະຍູນ, ຕາແສງເຊ ແລະຕາແສງດາກຈຶ່ງ. ທຳອິດຫັ້ນລຸງບົວເຍີນຢູ່ຕາແສງອະຍູນ, ຕໍ່ມາຈັດຕັ້ງເປັນໜ່ວຍໜຶ່ງໄປຢູ່ຮັບຜິດຊອບສາມຕາແສງ, ນີ້ແມ່ນມັນອອກມາຈາກຕາແສງອະຍູນນີ້ ຕາແສງເຊ, ຕາແສງດາກຈຶ່ງ. ປະຈຸບັນນີ້ ຕາແສງບໍ່ມີ ມີແຕ່ກຶມບ້ານ.

ເຈົ້າເມືອງດາກຈຶ່ງນັ້ນກໍ່ແມ່ນເຄື່ອນໄຫວຢູ່ຮາກຖານ. ເມື່ອຫັນທິດຕໍ່ສູ້ປະກອບອາວຸດນີ້ເພິ່ນກໍ່ຖອດພວກລຸງບົວເຍີນເມືອ, ຖອດພວກລຸງບົວເຍີນເມືອບໍ່ແມ່ນຈຸດປະສົງອັນອື່ນ, ຫາກແມ່ນຊ່ວຍກັບບັນດາຕາແສງ, ກັບບັນດາສະຫາຍ ທີ່ວໜ້າການທະຫານຂອງຫວຽດນາມມາຊ່ວຍເຫຼືອກຽມສ້າງກຳລັງປະກອບອາວຸດ, ເພື່ອຫັນທິດ, ລຸງບົວເຍີນເປັນຜູ້ຊິແປພາສາໃຫ້ເພິ່ນ. ທຳອິດພວກເພິ່ນສ້າງໝວດທະຫານເມືອງດາກຈຶ່ງ, ເມືອສ້າງໝວດທະຫານເມືອງກະລຶມ,ສ້າງຢູ່ເຊກອງເໜືອ, ເຊກອງໃຕ້ເປັນໝວດໜຶ່ງ.

ກຽມເພື່ອຫັນທິດຕໍ່ສູ້ດ້ວຍອາວຸດ, ເວລານັ້ນສູນກາງກໍ່ມີທິດເພື່ອສ້າງກຳລັງ, ລຸງບົວເຍີນ ກໍ່ເຮັດນຳພວກເພິ່ນ.

ປີ 1959 ຫັນທິດການຕໍ່ສູ້ແທ່ນປີ 60 ຕໍ່ສູ້, ມີການລັດຖະປະຫານຂອງກອງແລ, ເກີດກຳລັງເປັນກາງຮັກຊາດ ປີ 58-59 ນີ້ແລະ ລຸງບົວເຍີນ

ໄປນຳພວກເພິ່ນໄປ ສ້າງທະຫານທ້ອງຖິ່ນເວລານັ້ນ,ບັນດາສະຫາຍພະນັກງານລາວເວລານີ້ກໍ່ມີຫຼາຍສະຫາຍ, ຄືສະຫາຍອາຣິກນີ້ ແມ່ນວ່າວິລະຊົນກໍ່ເປັນຫົວໜ້າໝວດແຕ່ກ່ອນຂອງຢູ່ດາກຈຶ່ງ. ອາຣິກຫັ້ນລາວມີຊື່ສຽງແທ້ຈິງອ້າຍລາວແມ່ນພັນເອກ,ລາວກໍ່ພັນເອກຄືກັນລາວເສຍແລ້ວດຽວນີ້.

ຄົນນີ້ແຫລະ ຄົນຊົນເຜົ່ານີ້ແຫລະ ຄົນເຜົ່າຂອງພໍ່ນີ້ແຫລະ ທ່ານອາຣິກ ເປັນຊົນເຜົ່າກະຕູນີ້ແຫລະຢູ່ບ້ານຕາດນ້ອຍ. ຢູ່ນີ້ມັນມີຫຼາຍແຕ່ກ່ອນ, ພວກລຸງບົວເຢີນໄດ້ສ້າງມາ. ຢູ່ດາກຈຶ່ງດຽວນີ້ມີສະຫາຍຫົວໜ້າໝວດບຳນານແລ້ວ, ຢູ່ເຊກອງເໜືອດຽວນີ້ມີສະຫາຍບົວໄຂຫັ້ນພັກແລ້ວ. ທຳອິດເຂົາເຂົ້າໄປສ້າງເຖື່ອນໄຂກຳລັງຫັນທິດຕໍ່ສູ້ດ້ວຍອາວຸດຕາມທິດຂອງສູນກາງ. ອັນນັ້ນແມ່ນໄລຍະນັ້ນ. ຕໍ່ມາກໍ່ຫັນທິດ, ຫັນທິດເວລານັ້ນບໍ່ແມ່ນສັງດອກ ລຸງບົວເຢີນມາເມືອງໃຫ້ຮັບຜິດຊອບເສດຖະກິດຂອງເມືອງ, ຮັບຜິດຊອບວຽກງານເສດຖະກິດຂອງເມືອງດາກຈຶ່ງ. ເວລານັ້ນລຸງບົວເຢີນກໍ່ລຳບາກ ເພາະວ່າຢູ່ສວນພິກບໍ່ມີອີ່ສັງ, ສັດຕູປິດລ້ອມໝົດ, ສັກເກືອກໍ່ມີແຕ່ເຂດຍາດແຍ່ງ, ອາໃສຢູ່ພຸ້ນກໍ່ມາຊ່ວຍວຽກໄລຍະໜຶ່ງຢູ່ເມືອງດາກຈຶ່ງນີ້. ຕໍ່ຈາກນັ້ນເບື້ອງຕົ້ນບໍ່ແມ່ນລຸງບົວເຢີນຢູ່ໂຄສະນາອົບຮົມເມືອງດາກຈຶ່ງ, ມີການແຕ່ງຕັ້ງແຕ່ເມືອງດາກຈຶ່ງ. ກອງປະຊຸມໃຫຍ່ເມືອງດາກຈຶ່ງ ເພິ່ນຖອດລຸງບົວເຢີນເມືອແຂວງ ເຮັດເສດຖະກິດຂອງແຂວງ. ແຂວງຕາເວັນອອກກໍ່ມີຕັ້ງແຕ່ປີ 60, ກໍ່ໄປຊອກເກືອແຫລະກັບສະຫາຍຄຳລີພວກເພິ່ນແມ່ນແລ້ວຄຳລີ ພີ່ນ້ອງກັນຢູ່ກະລຶມນີ້ແຫລະ ເຮັດນຳກັນເທື່ອນັ້ນ. ໄລຍະໜຶ່ງເວລານັ້ນ ແຕ່ເລີ້ມມີແຂວງຕາເວັນອອກ, ໄດ້ມີມະຕິຂອງກົມການເມືອງປີນັ້ນເພິ່ນສ້າງແຂວງຕາເວັນອອກ ແຕ່ພວກເພິ່ນຂຶ້ນນຳຫຼັງ. ເວລາກ່ອນ ປີ 57, 58 ມັນມີສາມເມືອງເວລານັ້ນລຸງບົວເຢີນຢູ່ຮາກຖານກໍ່ແມ່ນເຄື່ອນໄຫວນຳພວກເພິ່ນ, ກໍ່ບໍ່ທັນມີອີ່ສັງເວລານັ້ນ, ມີແຕ່ເວລາທີ່ແຂວງຕາເວັນອອກເກີດຂຶ້ນນີ້ ລຸງບົວເຢີນຈຶ່ງເມືອ ຄືດຮອດເມຍ. ປີ 1960 ກອງປະຊຸມໃຫຍ່ຂອງແຂວງຕາເວັນອອກນີ້ກໍ່ບໍ່ມີຫຼາຍຄົນດອກ, ເວລານັ້ນກົມການເມືອງກໍ່ຕົກລົງໃຫ້ສ້າງຕັ້ງແຂວງຕາເວັນອອກ, ລຸງບົວລາງນີ້ແຫລະເປັນເລຂາ, ລຸງບົວ

ເຢີນກໍ່ເປັນຜູ້ຊ່ວຍວຽກຢູ່ຫັ້ນ. ກອງປະຊຸມໃຫຍ່ຄັ້ງທີໜຶ່ງລຸງບົວເຢີນຊ່ວຍແຂວງ ຕາເວັນອອກ ກອງປະຊຸມໃຫຍ່ຄັ້ງທີສອງ, ກໍ່ເປັນຜູ້ຊ່ວຍເພື່ອກຽມເຮັດພິທີເປີດ ກອງປະຊຸມ. ກອງປະຊຸມຄັ້ງທີສອງແມ່ນ ປີ 1965. ຄັ້ງທີສາມແມ່ນປີ 1970. ພາຍຫຼັງຄົບຮອບ 5 ປີ ຈຶ່ງມີກອງປະຊຸມໃຫຍ່ໜຶ່ງເທື່ອ. ປົກກະຕິແມ່ນ 5 ປີ ຕາເວັນອອກ. ຄັ້ງທີ່ສອງນີ້ພາຍຫຼັງກອງປະຊຸມໃຫຍ່ລຸງບົວເຢີນບໍ່ໄດ້ສະໝັກ ເລືອກຕັ້ງ, ແຕ່ວ່າຫຼັງຈາກເລືອກຕັ້ງແມ່ນກົມການເມືອງຕົກລົງໃຫ້ບົ່ງຕົວລຸງບົວ ເຢີນເຂົ້າໃນຄະນະພັກ. ປີ 1967 ບົ່ງຕົວລຸງບົວເຢີນເຂົ້າເປັນຄະນະພັກ. ຕໍ່ມາ ເພິ່ນບົ່ງຕົວລຸງບົວເຢີນເປັນກຳມະການປະຈຳກົມການເມືອງ, ພໍ່ເຖົ້າໜູຮັກນີ້ຈັດ ໃຫ້ລຸງບົວເຢີນເປັນ. ກອງປະຊຸມໃຫຍ່ຄັ້ງທີສາມແຂວງ ລຸງບົວເຢີນເຂົ້າເປັນກຳ ມະການຄະນະພັກເຮັດວຽກກຳມະການປະຈຳ. ປີ 70, 71, 72, ລຸງບົວເຢີນ ຍັງເປັນຮອງຫົວໜ້າໂຄສະນາອົບຮົມແຂວງ, ມາປີ 1973 ສະຫາຍຫົວໜ້າ ຄະນະພັກ ເປັນກຳມະການປະຈຳຖືກວິໄນເລີຍລຸງບົວເຢີນເປັນຫົວໜ້າໂຄສະ ນາອົບຮົມ, ມາເປັນກຳມະການປະຈຳຮັບຜິດຊອບວຽກງານໂຄສະນາອົບຮົມ ແຂວງແທນໝໍ່ຫົວໜ້າຖືກວິໄນ. ໄປຮອດ ປີ 1975 ຫຼັງຈາກສຳເລັດການປະ ຕິວັດແລ້ວ ກົມການເມືອງຕົກລົງວ່າເອົາແຂວງຕາເວັນອອກ ເຂົ້າຮ່ວມກັບ ແຂວງວາປີຄຳທອງກັບແຂວງສາລະວັນ, ເວລານັ້ນ ລຸງບົວເຢີນກໍ່ຍັງເປັນກຳ ມະການປະຈຳຮັບຜິດຊອບວຽກງານໂຄສະນາລວມຂອງຊາດ. ຖືວ່າສາມ ແຂວງ ວາປີຄຳທອງ, ເຊກອງດຽວນີ້ເຊກອງນັບແຕ່ ປີ 1985 ມາເອີ້ນເຊ ກອງ. ປ່ຽນແຂວງ ປີ 1984 ກໍ່ເຂົ້າມາສາລະວັນ, ເຂົ້າມາສາລະວັນນີ້ປີ 1975, 1976. ມາປີ 1984 ປະທານໄກສອນນີ້ແຫລະເວົ້ານຳລຸງບົວເຢີນ: ໂອ້! ບໍ່ໄດ້ຕີ່ເຢີນ! ດຽວນີ້ພວກເຮົາວ່າຕາເວັນອອກກັບສາລະວັນເຮົາວ່າເຜົ່ານີ້ ລະດັບຕໍ່າ, ໄປບໍ່ທັນກັບທົ່ງພຽງ, ດຽວນີ້ກົມການເມືອງມີທິດແຍກອອກ. ທຳ ອິດເພິ່ນເວົ້າແນວນີ້, ລຸງບົວເຢີນເວລານັ້ນ ຍັງເປັນກຳມະການປະຈຳຢູ່. ດຽວນີ້ ຫຼັງຈາກສຳເລັດການປະຕິວັດຊາດປະຊາທິປະໄຕແລ້ວ ເອົາກຳລັງເຂົ້າມາເພື່ອ ສ້າງສັງຄົມນິຍົມ, ຕາເວັນອອກເຂົ້າມາເພື່ອໃຫ້ມັນມີສາລະວັນກັບພວກເຮົາມີ

ກຳລັງແຮງ ເພື່ອສ້າງສັງຄົມນິຍົມ. ມາປີ 1984 ລຸງໄກສອນ ເພິ່ນວ່າ ໂອ້! ບໍ່ໄດ້ເຢີນເອີຍດຽວນີ້ເຈົ້າບໍ່ໄດ້ໄປບໍ່ທັນກັບທົ່ງພຽງຄັນບໍ່ແຍກ. ກົມການເມືອງຕົກລົງແຍກອອກ. ເວລາເຂົ້າສາລະວັນໄລຍະໜຶ່ງແລ້ວແມ່ນກົມການເມືອງໄດ້ຕົກລົງແຕ່ງຕັ້ງໃຫ້ລຸງບົວເຢີນເປັນຮອງເລຂາ ລຸງບຸນທາເປັນຮອງເລຂາ ລຸງບຸນທາແລ້ວກໍ່ສະຫາຍສົມສະໜິດເມືອວຽງ ບຸນທາແທນ, ໃຫ້ລຸງບົວເຢີນເປັນຮອງເລຂາຢູ່ຫັ້ນ. ມາຮອດແບ່ງແຂວງແລ້ວ ປະທານໄກສອນວ່າບໍ່ໄດ້, ແບ່ງອອກຕ້ອງສ້າງຕັ້ງແຂວງໃໝ່. ແຕ່ຫັ້ນມາຈຶ່ງຊື່ວ່າແຂວງເຊກອງ. ແຕ່ກ່ອນຕາເວັນອອກ, ດຽວນີ້ແຂວງເຊກອງເພິ່ນວ່ານຳລຸງບົວເຢີນ, ເຈົ້າຊິຂົນຂວາຍພວກໜຶ່ງຊິແຍກອອກແຂວງໃໝ່ນີ້ເປັນແນວໃດ, ຊິໃສ່ຊື່ແນວໃດ. ລຸງບົວເຢີນກໍ່ສະເໜີທຳອິດນີ້ລຸງບົວເຢີນວ່າແນວນີ້: ເຮົາວ່າໃສ່ຊື່ແນວນີ້ໄດ້ບໍ່ອ້າຍນີ້ແມ່ນເຊກະໝານເຊກອງ ກະລຶມ ລະມາມຫັ້ນ. ແບ່ງເປັນແຂວງຄາວນັ້ນບໍ່ໄດ້ເວລານັ້ນບໍ່ໄດ້, ບົວລະພາເຊກະໝານ, ແຂວງບົວລະພາ, ຈຶ່ງໄດ້ໃສ່ຊື່ສອນເວົ້າກັບເຂລາຂອງເພິ່ນວ່າ ອັນພໍ່ເຖົ້າບົວລາງຫັ້ນເກາະ ບາມສະກຸນເພິ່ນ ບົວລະພາ, ຈຶ່ງໄດ້ໃສ່ຊື່ນີ້ມັນກໍ່ເປັນໄປໄດ້. ຄັນຊັ້ນຊິໃສ່ແນວໃດ. ລຸງບົວເຢີນວ່າ: ຄັນແນວນັ້ນກໍ່ເອົາຊື່ແຂວງເຊກອງລຸງໄກສອນວ່າ ເອີຕົກລົງແຂວງເຊກອງ, ຈຶ່ງເປັນແຂວງເຊກອງທຸກວັນນີ້.

ພໍ່ເຖົ້າໄກສອນຖາມລຸງບົວເຢີນວ່າ: ເຈົ້າຊິໃສ່ຊື່ແນວໃດ? ເພິ່ນເວົ້ານຳລຸງບົວເຢີນ ໂອ້! ໄດ້ໄດ້, ແນຄ້ອນໃດ່ໃສ່ອັນນັ້ນ. ຊື່ແນວໃດ, ໝາຍຄວາມວ່າບໍ່ມີໃຜເລີຍ. ຊັ້ນແບ່ງລຸງບົວມາເປັນເລຂາຢູ່ນີ້, ແຕ່ງຕັ້ງສະຫາຍບົວລາເປັນເລຂາສາລະວັນ ປີ 1984 ກໍ່ເປັນເລຂາໄລຍະໜຶ່ງຢູ່ຫັ້ນ, ລຸງບົວເຢີນເປັນຮອງເພິ່ນນີ້, ແລ້ວຮອງເລຂາກໍ່ແຕ່ງຕັ້ງມານີ້. ລະເລືອກຕັ້ງຄືຊິແມ່ນສອງເທື່ອຢູ່ເຊກອງນີ້ ລຸງບົວເຢີນເປັນເລຂາຢູ່ນີ້, ເປັນເຈົ້າແຂວງຢູ່ນີ້, ບາງເທື່ອໝູ່ວ່າ ເອີບໍ່ແມ່ນເປັນເຈົ້າແຂວງ, ລະເປັນປະທານປົກຄອງ. ແຕ່ກ່ອນເປັນປະທານປົກຄອງແຂວງ, ເມືອງກໍ່ປະທານປົກຄອງເມືອງ. ກອງປະຊຸມຄັ້ງທີສາມຫັ້ນລຸງບົວເຢີນກຳມະການ ແລະ ຄັ້ງທີ່ສີ່ ສອງສະໄໝ.

ປີແປດປາຍ ແປດສິບເອັດລຸງບົວເຢີນ[73] ໄດ້ເຂົ້າຄັ້ງທີ ໜຶ່ງ[74], 81, 83, 84, 85. ປີ 85 ນີ້ ລຸງບົວເຢີນໄດ້ເຂົ້າຄັ້ງທີສອງ, ສິບປີໄດ້ສອງສະໄໝ ປີ 1981 ລຸງບົວເຢີນໄປຮຽນຢູ່ນັກຮົບພິເສດ, ກໍ່ມາເຂົ້າຄັ້ງທີສາມ ເຂົ້າມາຄັ້ງທີສີ່, ແຕ່ຄັ້ງທີ 5 ລຸງບົວເຢີນກໍ່ສະເໜີນຳທ່ານໄກສອນແລ້ວວ່າ ລຸງບົວເຢີນບໍ່ໄດ້, ອາຍຸກະສຽນນີ້ມັນເປັນເລືອດດັນສູງ. ທ່ານໄກສອນວ່າ ຊິພະຍາຍາມບໍ່ໄດ້ບໍ? ລຸງບົວເຢີນວ່າ ໂອ້ຍບໍ່ໄດ້ ບໍ່ໄດ້, ຈັກໜ້ອຍຊິປະທີ່ຕັ້ງບໍ່ມີໃຜເຮັດ, ຄັນມັນເກີດມາແນວນີ້. ທ່ານໄກສອນວ່າ ຊິອະນຸມັດໃຫ້ອອກບຳນານ. ແຕ່ກໍ່ບໍ່ທັນຍອມ, ຢາກພັກກໍ່ພັກ, ແຕ່ເຈົ້າຫາກເປັນຮອງຫົວໜ້າຄະນະຈັດຕັ້ງສູນກາງກ່ອນທ່ານໄກສອນເວົ້າ, ລຸງບົວເຢີນຕ້ອງເປັນຫົວໜ້າຈັດຕັ້ງສູນກາງ ກຽມຈັດກອງປະຊຸມໃຫຍ່ຄັ້ງທີ 5. ລຸງບົວເຢີນ ຢູ່ໃນກຳມະການສູນກາງຂັ້ນທີສາມຂັ້ນທີສີ່, ກອງປະຊຸມໃຫຍ່ຄັ້ງທີຫ້ານີ້ ແມ່ນລຸງບົວເຢີນຂໍນຳເພິ່ນ ທ່ານໄກສອນເວົ້າວ່າ ເຂົາບໍ່ໃຫ້ກໍ່ຢ່າດຽວນີ້ເຈົ້າພ້ອມກັບການຈັດຕັ້ງນີ້ ກຽມກອງປະຊຸມໃຫຍ່ຄັ້ງທີຫ້າກ່ອນຈຶ່ງໃຫ້ເຈົ້າພັກ ທ່ານໄກສອນ! ເອີກໍ່ເຮັດກໍ່ເຮັດ ທ່ານໄກສອນວ່າໃຫ້ລຸງບົວເຢີນສຸຂະພາບບໍ່ແຮງກອງປະຊຸມໃຫຍ່ຄັ້ງທີ່ຫ້າແລ້ວກໍ່ບໍ່ຍອມ, ເຈົ້າຕ້ອງພ້ອມກັບຄະນະຈັດຕັ້ງສູນກາງກຽມ ກອງປະຊຸມຈັດຕັ້ງທົ່ວປະເທດຄັ້ງທີເຈັດ, ເຮັດກ່ອນລຸງບົວເຢີນເຮັດກໍ່ເຮັດ, ແຕ່ວ່ານ້ອງຊິພັກລະເອີ້ນງ່າຍໆໃດອ້າຍ ທ່ານໄກສອນວ່າ ນ້ອງພັກກໍ່ພັກກໍ່ກຽມໃຫ້ມັນແລ້ວພັກຜ່ອນ. ຈຶ່ງວ່າມາຮອດຕົ້ນປີ 1991 ເພິ່ນຈຶ່ງອະນຸມັດລຸງບົວເຢີນ. ຫຼັງຈາກເພິ່ນອະນຸມັດແລ້ວ, ເພິ່ນອະນຸຍາດໃຫ້ລຸງບົວເຢີນຍ່າງມານີ້, ລຸງເຢີນກະຂໍວ່າ : ເວລານັ້ນລຸງສີສົມພອນເປັນຫົວໜ້າຄະນະຈັດຕັ້ງສູນກາງ, ຫຼັງຈາກອະນຸມັດແລ້ວທ່ານໄກສອນ, ທາງຄະນະເລຂາເພິ່ນອະນຸມັດແລ້ວ ໂອ້ຍ ກໍ່ຢ່າສາ! ເຈົ້າຢ່າໄປຢູ່ກອງ, ເຈົ້າຢູ່ນີ້ຢູ່

---

73 ເມຍຂອງລຸງບົວເຢີນ ຫຼື ໂບ້ເຢີນ (ພໍ່ເຢີນຕາມພາສາເຜົ່າຕະລຽງ) ທັງສາມຄົນແມ່ນເຜົ່າຕະລຽງຢູ່ດາກຈຶ່ງໝົດ.

74 ທ່ານໄກສອນ ໃຫ້ລຸງບົວເຢີນພັກຜ່ອນຢູ່ແຂວງວຽງຈັນ, ແຕ່ພໍ່ເຖົ້າບົວເຢີນຢາກເມືອພັກຜ່ອນຢູ່ແຂວງເຊກອງ.

ວຽງຈັນນີ້ແຫລະ ໃຫ້ເຈົ້າຢູ່. ລຸງບົວເຢີນ ບໍ່ໆ ບໍ່ຍາກບໍ່ຢູ່ດອກພໍ່ເຖົ້າເອີ້ຍ!. ລຸງບົວເຢີນລະເມືອຢູ່ບ້ານຂອງລາວ ກໍ່ເມືອຮອດເຊກອງປະຈຸບັນນີ້. ແນວນັ້ນແຫຼະ.

ລຸງບົວເຢີນສ້າງຄອບຄົວຜູ້ທຳອິດ ແມ່ນປີ 1958. ເມຍເພິ່ນຜູ້ດຽວນີ້ບໍ່ມີອີ່ສັງນີ້ກໍ່ປີ 1986, ປີ 1986 ເພິ່ນເອົາກັນນີ້ໄດ້ຜູ້ນີ້. ຜູ້ທຳອິດຫັ້ນເສຍແລ້ວ, ເສຍກໍ່ຍ້ອນເປັນມະເຮັງ ເພິ່ນໄປປົວຢູ່ເຊພຸ້ນ ທ່ານໝໍຜ່າຕັດ ເມຍເພິ່ນເວລານັ້ນ ລຸງເຢີນເຂົ້າຮ່ວມກອງປະຊຸມໃຫຍ່ຄັ້ງທຳອິດ ເພິ່ນມາແຕ່ສາລະວັນ ສາວສັດຕິຢູ່ຈັດຕັ້ງບອກເພິ່ນວ່າ ລຸງເອີຍເຈົ້າກໍ່ບໍ່ໄປເບິ່ງເອື້ອຍເຈົ້າສາ! ເຂົາກວດກາແຕ່ພຸ້ນກວດກາແລ້ວ, ຄະນະພັກຄະນະປະຈຳນີ້ປຶກສາປຶກສາຫາລືບໍ່ມີເວລາໄປ. ເຂົາໂທມາຫ້ອງລຸງເຢີນວ່າ ໂອ້! ເອື້ອຍ ດຽວນີ້ເປັນແນວນີ້, ເຂົາບອກວ່າມັນເປັນກ້ອນເປົ້າ, ຄັນບໍ່ປາດ, ປາດແລ້ວໄລຍະລະຫວ່າງສາມອາທິດມັນລະເກີດມະເຮັງ. ເກີດຂຶ້ນແລ້ວລາວເສຍຊີວິດ. ພໍ່ເຖົ້າລຸງບົວເຢີນນີ້ແລ້ວບ້ານດຣາດນີ້. ເມຍຜູ້ນີ້ເພິ່ນຢູ່ບ້ານດຣາດ, ເພິ່ນຕິເຮືອນ, ພໍ່ແມ່ຂອງລາວກໍ່ຮັກເວລານັ້ນ.

ແຕ່ກີ້ລຸງບົວເຢີນເປັນອາສາສະໝັກເຄື່ອນໄຫວຢູ່ຫັ້ນ. ຮູບຜູ້ຢູ່ຫັ້ນແຫຼະ. ທຳອິດຂອງເພິ່ນຫັ້ນມີລູກຫ້າຄົນແຕ່ວ່າລ້ຽງໄດ້ແຕ່ສາມ. ສາມນີ້ຜູ້ໜຶ່ງດຽວນີ້, ຜູ້ທີ1 ເສຍ, ຜູ້ທີ2 ເສຍ, ຜູ້ທີ3 ນ້ອງຂອງເພິ່ນດຽວນີ້ແມ່ນເກີດປີ 60. ຜູ້ນັ້ນໄລຍະໜຶ່ງມັນມາເຮັດວຽກຢູ່ຈັດຕັ້ງສູນກາງ, ຢູ່ກິນກໍ່ສ້າງພະນັກງານ, ຕໍ່ມາເຂົາເຫັນວ່າຢູ່ສະຫວັດດີການບໍ່ມີຄົນກໍ່ຍ້າຍໄປພຸ້ນ. ຄົນໜຶ່ງດຽວນີ້ກໍ່ໄປຮຽນຢູ່ສະຖາບັນການເມືອງການປົກຄອງ, ເດືອນທີການີ້ຊິສຳເລັດ, ສອງປີປາຍ. ຜູ້ທີສອງກໍ່ແມ່ນລູກສາວນີ້ແຫຼະ, ຢູ່ນີ້ນ້ອງຂອງເພິ່ນລູກສາວນີ້. ທຳອິດແມ່ມັນເສຍ, ລະເຂົາຈັດຕັ້ງໄປຮຽນ, ຂອງວ່າມັນຢູ່ລະມັນໝຸດໝັດ. ແມ່ມັນເສຍກໍ່ໃຫ້ໄປຮຽນຢູ່ຫວຽດນາມ, ໄປຮຽນຢູ່ຕຶງກີໄປຮຽນແພດຊັ້ນກາງ, ສຸດທ້າຍກໍ່ຜົວກັບເມຍໄປຮຽນ, ຜົວໄປຮຽນສັດຕະວະແພດ, ລະພົບກັນ, ລະຮຽນກັນບໍ່ຈົບ ຈົບມາດຽວນີ້ຢູ່ນີ້. ມັນຄ້າຂາຍດຽວນີ້, ຜົວມັນຢູ່ກະສິກຳ, ຈັກຊິເຮັດຫຼືບໍ່ແນວໃດກໍ່ບໍ່ທັນ

ຮູ້ຈັກ. ລຸງບົວເຍີນວ່າອັນນີ້ລູກເມຍ, ຜູ້ກ່ອນ, ເມຍຂອງເພິ່ນຜູ້ນີ້ບໍ່ມີລູກ. ລູກຂອງເພິ່ນຜູ້ທີສາມແມ່ນ ທ້າວລັດນີ້ ມັນເກີດປີ 70, ແຕ່ກ່ອນມັນເຮັດຢູ່ກົດລັບຂອງທະຫານ, ດຽວນີ້ໄປຮຽນບຳລຸງວັດທະນະທຳທີ່ນັ້ນ, ມີແຕ່ສາມຄົນ, ເວລານັ້ນລຸງບົວເຍີນເປັນທະຫານອາສາສະໝັກຫວຽດນາມ.

ລຸງບົວເຍີນສ້າງທຳອິດກໍ່ຢູ່ນີ້ແຫລະ, ບ່ອນຈຸດທຳອິດພັ້ນຈັກພາກສ່ວນອິດສະຫຼະ ມາແຕ່ໄທ, ມາແຕ່ຫວຽດນາມກໍ່ຂຶ້ນມາ. ລຸງບົວເຍີນວ່າ: ຈຸນີ້ບໍ່ມີຊື່, ນຳຫຼັງອ້າຍແກ້ວຫຼວງເສນາ. ກໍ່ປີ 1948 ນີ້ແຫລະ, ເວລານັ້ນຈຸນີ້ກໍ່ຍັງຢູ່ໄທພຸ້ນ, ທ່ານສຸພານຸວົງກໍ່ກຽມຈັດຕັ້ງກອງໄຊຈັກກະພັດທັ້ນເດຈຸອ້າຍແກ້ວນີ້ທັ້ນ, ຈຸນີ້ລຸງບົວເຍີນຫຼັງຊື່ຫຼາຍຄົນ, ແຕ່ວ່າພວກນີ້ແມ່ນເຄື່ອນໄຫວໄປຫວຽດ ນາມຫຼັງຈາກຈິດໝາຍທ່ານຄຳໄຕ ທີ່ເອົາຂອງທ່ານສຸພານຸວົງ ໄປນັ້ນ, ເພາະວ່າເຂົາໄດ້ສ້າງລະເດທາງສາຍນີ້, ແຕ່ທັ້ນມາລະສົມທົບກັນເລີຍ. ເຂົາຂຶ້ນມາທາງພຸ້ນມາທາງຊາຍແດນຫວຽດນາມ, ກວາງນາມພຸ້ນ. ລຸງບົວເຍີນກໍ່ເຈີຢູ່ທັ້ນແລ້ວກໍ່ພາກັນຂະຫຍາຍອອກ, ມັນຫຼາຍໝວດ. ຈຸອ້າຍແກ້ວຫຼວງເສນາ, ຈຸອ້າຍຖາວອນນີ້, ຜູ້ນີ້ແຫລະລຸງບົວເຍີນແຕ່ທັ້ນມາກໍ່ບໍ່ໄດ້ເຈີດອກ, ເຂົາວ່າຊິສ້າງພື້ນຖານໄດ້ແລ້ວ ແລະຈຶ່ງມີພື້ນຖານໃຫ້ກຳລັງເຮົາຂະຫຍາຍມາເພື່ອຂ້າມມາເບື້ອງນີ້. ສ່ວນຫຼາຍແລ້ວລຸງບົວເຍີນໄດ້ຂັ້ນສູ້ຮົບອັນໜຶ່ງ. ແຕ່ທັ້ນມາເພິ່ນເປັນພະນັກງານກໍ່ສ້າງຮາກຖານ. ເພິ່ນເປັນພະນັກງານຂົນຂວາຍ, ກໍ່ສ້າງຮາກຖານການເມືອງ, ແລ້ວກໍ່ມາເປັນພະນັກງານການເມືອງ. ໃນການທີ່ວ່າໄປຕີສັດຕູຢູ່ແນວໜ້າລຸງບົວເຍີນໄດ້ເຂົ້າເທື່ອໜຶ່ງຕີກັບຝຣັ່ງຢູ່ຫວຽດນາມ. ແຕ່ວ່ານັ້ນເພິ່ນຢູ່ລາວບໍ່ໄດ້ຕີສັດຕູ, ຢູ່ລາວມີແຕ່ເພິ່ນສະກັດລັດຕີທີ່ນັ້ນ, ໄປນຳກອງຫຼອນ, ກຳກັບກອງຫຼອນເວລາຢູ່ໜ່ວຍຂົນຂວາຍກໍ່ສ້າງຮາກຖານ.

ເວລາລຸງບົວເຍີນຢູ່ຫວຽດນາມ ເພິ່ນໄດ້ມີແຕ່ຫຼຽນກາ, ແຕ່ຢູ່ລາວພວກເຮົານີ້ເພິ່ນໄດ້ຫຼຽນໄຊຊະນະເລີດຊັ້ນໜຶ່ງ, ຫຼຽນໄຊອິດສະຫຼະຊັ້ນໜຶ່ງ, ຫຼຽນໄຊແຮງງານຊັ້ນໜຶ່ງ, ຫຼຽນໄຊແຮງງານຊັ້ນສອງ, ຫຼຽນໄຊອິດສະຫຼະຊັ້ນໜຶ່ງ. ດຽວນີ້ຫຼຽນໄຊຂອງເພິ່ນກໍ່ໝົດຫວ່າງແລ້ວນີ້ ສູນກາງມາເອົາເມືອສູນກາງ, ເຂົາ

ຢາກສິມທຸບໃຫ້ລຸງບົວເຢີນສຸກເສີມຫັ້ນ, ແຕ່ເພິ່ນວ່າຍັງບໍ່ທັນໄດ້, ທ່ານສະໝານວ່າ: ຍັງບໍ່ທັນໄດ້. ຫຼຸນເຂົາເອົາເມືອໝົດ. ດຽວນີ້ລຸງບົວເຢີນກໍ່ຍັງຫຼາຍຢູ່ນີ້ໃບຍັ້ງຢືນນີ້, ຢາກຍັ້ງຢືນຂອງສະໄໝ ປະທານສຸພານຸວົງ ສະໄໝທ່ານພູມີວົງວິຈິດ, ຕໍ່ມານີ້ແມ່ນນາຍົກລັດຖະມົນຕີ ສີສະຫວາດແກ້ວບຸນພັນ. ຫຼຸນຂອງລຸງບົວເຢີນນີ້ຍັງມີຄືບ, ແຕ່ວ່າເຫຼືອນັ້ນເຂົາເອົາເມືອສູນກາງໝົດ, ສູນກາງຂໍນຳແດ່ຈັກໜ້ອຍ, ຄັນຕາຍລະບໍ່ໄດ້ເອົາເມືອ, ຂໍສິມມະນາຄຸນທົດແທນລັດ, ເອົາໜ່ອຍຫຼຽນໄຊຫຼຽນກາເປັນເງິນຊົດເຊີຍ [75]. ສູນກາງເອົາເງິນໃຫ້ແຕ່ວ່າບໍ່ທັນມີອັນໃດ. ຖືວ່າເອົາຫຼຽນໄປແລ້ວແຕ່ບໍ່ທັນໄດ້ເງິນ, ເຂົາເອົາໄປແລ້ວຕັ້ງເພິ່ນແຈ້ງເພິ່ນປະກາດ, ຕັ້ງແຕ່ປະກາດວ່າຜູ້ໃດໄດ້ຫຼຽນລະດັບໃດ ລະປ່ຽນໄປຍື່ນໃຫ້ຈັດຕັ້ງທັງໃບຍັ້ງຢືນທັງໜ່ອຍ, ກົມຈັດຕັ້ງຈະຄິດໄລ່ເປັນເງິນ, ເພິ່ນສະເໜີເຮັດສິມມະນາຄຸນ ຫຼື ວ່າເງິນຊົດເຊີຍ.

ຕາມພໍ່ເຖົ້າສະໝານ ເວົ້າແຕ່ຫຼັກມັນຈຳນວນໜຶ່ງ ມີແຕ່ພວກທະຫານເອົາໝົດເລື່ອງຊົດເຊີຍຫັ້ນ. ລຸງບົວເຢີນວ່າກໍ່ໃຫ້ເພິ່ນແດ່ເພິ່ນຕອບລຸງບົວເຢີນ: ໂອ້ຍ! ຍັງຢູ່ນໍາຫຼຽນໄຊ ຫຼຽນການີ້, ເອີໃບຍັ້ງຢືນກໍ່ມີໝົດ. ລຸງບົວເຢີນວ່າຍັງໆ ຢູ່ໃນເສື້ອນີ້ແຫລະ, ໃບຍ້ອງຍໍສອງ. ເວລາລຸງບົວເຢີນພັກແລ້ວກໍ່ຂໍ ກໍ່ໄດ້ແລ້ວເຮືອນນີ້, ສູນກາງໃຫ້ເພິ່ນ, ສູນກາງໃຫ້ ລຸງບົວເຢີນ ກັບ ລຸງບົວລາງກັບສະຫາຍ ນາງເພັດສະໝອນ ລັດຖະສີມາ ຜູ້ໜຶ່ງສິບຫ້າລ້ານ, ສິບຫ້າລ້ານຫັ້ນທຳອິດຂຶ້ນມາລະແມ່ນສິບເຈັດລ້ານປາຍ, ສິບເຈັດລ້ານປາຍລຸງບົວເຢີນກໍ່ຂຽນຄຳຮ້ອງວ່າ ຄັນສິບເຈັດລ້ານນີ້ເຂົາບໍ່ເຮັດແບບນັ້ນເຂົາບໍ່ເຮັດແບບນັ້ນ, ເຂົາບໍ່ເອົາແບບນັ້ນ, ສະເໜີໃຫ້ຈັດຕັ້ງສູນກາງ, ສູນກາງສະເໜີໃຫ້ນາຍົກເວລານັ້ນ ທ່ານຄຳໄຕ ເພິ່ນວ່າ ແກ້ໃຫ້ເພິ່ນ ສອງເທື່ອ: ໜຶ່ງເອົາເງິນທືນນຳເພິ່ນ,

---

[75] ຕາມມະຕິຂອງລັດຖະບານ ສ ປ ປ ລາວ ແຕ່ກ່ອນວ່າ: ຜູ້ໃດໄດ້ຫຼຽນໄຊຫຼຽນກາຫຼາຍຂັ້ນເທົ່າຈະເອົາມາຕີລາຄາ, ຈັດປະເພດແລະທຸບໃສ່ເງິນ,ແລ້ວຈະຕອບແທນດ້ວຍເງິນໃຫ້ແຕ່ລະທ່ານເຈົ້າຂອງຫຼຽນໄຊຫຼຽນກາ.

ສອງມາຕິກລິງໃຫ້ເຊກອງ ເອົາໄມ້ໃຫ້ເພິ່ນເລີຍວ່າ ສອງລ້ານປາຍ, ສອງມາລິດກະຕຸ້ງນອັນນີ້ແຫຼະ.

ເວລານັ້ນລຸງບົວເຍີນເມື່ອນີ້ກໍ່ຂີ່ລົດອັນນັ້ນ ລົດໂຕໂຍຕ້າແອ່ນດຳ, ເວລາໄປລົມອຳນາດການຈັດຕັ້ງ. ເວລາລຸງບົວເຍີນຂໍພັກຜ່ອນ ສະຫາຍອຸດົມວ່າ ໂອ້! ສະຫາຍບົວຄຸນທາງພວກເຮົາບໍ່ທັນມີກໍ່ເຊົ່າສາ, ເອົາລົດນີ້ມາສົ່ງໃຫ້ທາງຫ້ອງການຊິເອົາກາຕຸງນໄວ້ໃຫ້. ເອົາກາຕຸງນມາເວລານັ້ນເພິ່ນຕີລາຄາເຕັກນິກວ່າກາຕຸງນເວລານັ້ນຊື້ມາເກົ່າແລ້ວ, ກໍ່ຍັງ 85 ສ່ວນຮ້ອຍນີ້ ແປັກໆເລີຍໄປບໍ່ໄດ້. ບາດແລ້ວລຸງບົວເຍີນໄປສະເໜີລົດໃໝ່ ສູນກາງບໍ່ທັນຕິກລົງ, ດຽວນີ້ລົດນີ້ເລີຍບໍ່ໄດ້, ມີແຕ່ສາມອັນນີ້ໄດ້, ແຕ່ຈັດຕັ້ງໃຫ້ຢູ່ ຈັດຕັ້ງເພິ່ນໃຫ້ຕູ້ເຢັນ. ດຽວນີ້ແກງຕົກເຕົາໄຟທີ່ນັ້ນແຫລະບໍ່ມີແນວອື່ນ. ນອກຈາກນີ້ທາງແຂວງນີ້ກໍ່ເຮືອນຢູ່ຂອງເພິ່ນຢູ່ລຸ່ມນີ້ ເພິ່ນສ້າງເວລາທຳອິດ, ເວລາທ່ານໄກສອນມາກຽມມາຊື້ນຳກອງປະຊຸມໃຫຍ່ຄັ້ງທີໜຶ່ງທັ້ນແຫລະສ້າງຢູ່ທັ້ນ. ສຸດທ້າຍເພິ່ນກໍ່ຕົກລົງໃຫ້ລຸງບົວເຍີນສີໜຶ່ງກ່ອງ, ສຳລະແລ້ວບໍ່ມີຫຍັງ, ລົດດຽວນີ້ກໍ່ຍັງລົດທາກມັນເກົ່າແຮງໃຊ້ບໍ່ໄດ້. ຫວ່າງແລ້ວນີ້ເພິ່ນໄປຫາພໍ່ເຖົ້າສະໝານ.

ລົດຂອງເພິ່ນໃຊ້ບໍ່ໄດ້ແລ້ວ, ແປງແລ້ວກໍ່ເພ, ແປງແລ້ວກໍ່ເພ, ໃຊ້ບໍ່ໄດ້ແລ້ວ. ທ່ານສະໝານຈຶ່ງສະເໜີໃຫ້ຫົວໜ້າຫ້ອງວ່າການກັບຜູ້ປະຈຳການພິຈາລະນາແກ້ໄຂ. ມື້ຊືນມື້ໜຶ່ງເພິ່ນແຟັກມາຫ້ອງວ່າການກໍວ່າຄຳສະເໜີຂອງລຸງບົວເຍີນ ທີ່ ທ່ານສະໝານ ນີ້ໄດ້ລາຍງານໃຫ້ຜູ້ປະຈຳການແລ້ວ, ເພິ່ນວ່າເຫັນດີ, ມອບໃຫ້ລັດຖະບານແກ້ໄຂທາກແຕ່ວ່າຈັກແນວໃດ, ລັດຖະບານຄົ້ນຄວ້າແກ້ໄຂແນວໃດ, ລຸງບົວເຍີນກໍ່ບໍ່ຮູ້ແລ້ວທີ່ນັ້ນ. ບຸນຄຸນຂອງພັກຕໍ່ເພິ່ນນີ້ກໍ່ດາຍ. ຂອງຫວຽດນາມລຸງບົວເຍີນບໍ່ໄດ້ອີ່ສັງ, ໄດ້ແຕ່ຫຼຽນກາມັກຣິບທີ່ນັ້ນແຫລະ.

ຄວາມຮູ້ສຶກຂອງລຸງບົວເຍີນກໍ່ແມ່ນວ່າ: "ຂ້ອຍບໍ່ໄດ້ຄິດຂ້ອຍຕິດກັບແມ່ເຖົ້ານີ້ ລະຂ້ອຍກໍ່ຢ່າສາແນວມັນກະເຫີນແລ້ວ, ພໍ່ແມ່ຂ້ອຍກໍ່ຕາຍແລ້ວ, ມີແຕ່ອ້າຍນ້ອງ ແຕ່ວ່າເທິງໆ ກໍ່ຄ່ອຍເມືອຢາມເພິ່ນ. ແຕ່ເຂົາວ່າເຈົ້າຊິເມືອບໍ! ໂອ້ຍຂ້ອຍວ່າດຽວນີ້ຍາກ, ອາຍຸກະສຽນສູງແລ້ວກໍ່ຢ່າ, ຕໍ່ໄປນີ້ກໍ່ປະກະດູກຢູ່ລາວນີ້

ແລ້ວ". ນອກນັ້ນເພິ່ນກໍ່ບໍ່ມີຄວາມຄິດອີ່ສັງ, ຄັນເພິ່ນສະເໜີເມືອນີ້ເຂົາກໍ່ໃຫ້ຢູ່ດອກ, ເຂົາວ່າໄດ້ແຕ່ເພິ່ນວ່າເຊົາສາກະເທີນແລ້ວ, ມັນເປັນສຸກອົກສຸກໃຈແລ້ວປະຊາຊົນລາວນີ້.

ລຸງບົວເຍີນຢູ່ພີ້ມີແຕ່ສາມປີປາຍໜຶ່ງ, ພາຍຫຼັງຍຶດອຳນາດ, ສ່ວນຫຼາຍເພິ່ນກໍ່ມາທາງນີ້ໝົດ ເພິ່ນເຂົ້າພັກນີ້ກໍ່ປີ 1949. ເພິ່ນເຂົ້າພັກຢູ່ພັກຄອມມູຍນິດຫວຽດນາມ, ແຕ່ວ່າຢູ່ເສັ້ນທາງໄປລາວ.

ເສັ້ນທາງຢູ່ເມືອງຢາງນີ້, ເສັ້ນທາງລຳລຽງຂົນສິ່ງນີ້ເພິ່ນເຂົ້າພັກຢູ່ຫັ້ນ, ມັນກໍ່ສີ່ສິບປາຍປີແລ້ວ. ເວລານັ້ນພັກຫວຽດນາມເຂົາມາແລ້ວ ບັດຫັ້ນພັກເພິ່ນບໍ່ມີ. ເພິ່ນກັບກໍ່ໄດ້ຂັ້ນເທິງເພິ່ນກໍ່ອະນຸມັດແລ້ວ, ເພິ່ນບອກແລ້ວຕົກລົງແລ້ວບໍ່ກັບ, ເວົ້ານຳລູກນຳເມຍແລ້ວວ່າບໍ່ກັບ, ມີແຕ່ໂອກາດຂັ້ນເທິງອະນຸຍາດເພິ່ນເມືອຢາມ, ລົດລາງມີກໍ່ເມືອຢາມ, ບາງເທື່ອພວກເອື້ອຍເພິ່ນກໍ່ສົ່ງຂ່າວມາຫາ, ພວກເພິ່ນກໍ່ຈັກຊິເຮັດແນວໃດແຫລະ, ໄປບໍ່ໄດ້. ເຂົາກໍ່ວ່າອັນນີ້ໝູ່ລຸງບົວເຍີນ, ລຸງນຳລຸງເວົ້າລຸງເຍີນວ່າ: ໂອ້ຄັນເຈົ້າຢູ່ຫວຽດນາມເຈົ້ານີ້ສະໜຸກ. ເຈົ້າສ່ຳນີ້ເງິນເດືອນເຈົ້າບໍ່ຮອດໃສດອກ. ຢູ່ຫວຽດນາມໂອ່ຍຢ່າງວ່າ, ລຸງບົວເຍີນວ່າລາວດຽວນີ້ພວກເຮົາຍັງທຸກຍາກ, ເພິ່ນໃຫ້ສ່ຳໃດ, ເພິ່ນໃຫ້ເຮືອນລົດລາງ, ເພິ່ນບໍ່ວຸ້ນວາຍບັນຫານັ້ນດອກ, ເພາະວ່າດຽວນີ້ມັນມີສອງອັນ, ນ້າສາວຂອງລຸງເຍີນເວົ້າໝູ່ລະວ່າລຸງເຍີນໂງ່, ເຈົ້າຄອງຕຳແໜ່ງເຈົ້າແຂວງ ເລຂາພັກແຂວງນີ້ ບໍ່ໄດ້ກອບໂກຍເຈົ້າທຸກແນວນີ້, ຍ້ອນລຸງເຍີນໂງ່, ລຸງເຍີນວ່າ ໂງ່ກໍ່ຢ່າພວກເພິ່ນນີ້ສອງຄົນໃດ ພໍ່ເຖົ້າບົວລາງກັບເພິ່ນ, ລູກຫຼານເພິ່ນວ່າພວກເຈົ້ານີ້ໂງ່ ໄປເຮັດວຽກບໍ່ຈັກຊິກອບໂກຍ. ລຸງເຍີນວ່າໂອ່ຍຢ່າ "ຢ່າສາຂອງໝູ່ເຮັດໄດ້ກໍ່ຢ່າສາ, ພວກເຮົາເຮັດໃຫ້ມັນແລ້ວກໍ່ແລ້ວໄປສາ, ໄດ້ກໍ່ບໍ່ມີສັງຜູ້ໄດ້ຊິໄດ້ຊື່ສຽງຕໍ່ໄປ ຫຼືບໍ່, ຮູ້ສະພາບແນວນີ້ບໍ່ຮູ້ເອີຍ! ເພິ່ນວ່າໝູ່ຂີ່ລົດຄັນນັ້ນຄັນນີ້, ເຮືອນສາມສີ່ຫ້າຊັ້ນ, ເຈົ້ານີ້ໄປໂງ່, ເວລາເຈົ້າເຮັດວຽກຢູ່ນີ້ ເຈົ້າບໍ່ຈັກເລື່ອງເອົາ". ແຕ່ວ່າເຊກອງເວລານັ້ນມັນກໍ່ຍັງທຸກຍັງຍາກຢູ່, ແຕ່ວ່າຈິດໃຈລຸງບົວເຍີນແມ່ນເອົາບໍ່ໄດ້ຢ່ານຫຼາຍກວ່າ. ເພິ່ນສັດຊື່ບໍລິສຸດເລື່ອງທິດສະດີຕ່າງໆ.

ອັນທີ່ບໍ່ດີເພິ່ນນີ້ມັນຊິມເຂົ້າໃຈ, ຄັນຊິເຮັດຜິດໜ້ອຍໜຶ່ງຢູ່ໃນໃຈກໍ່ບໍ່ເຂົ້າໃຈ, ບໍ່ໄດ້ແນວນີ້ບໍ່ເຄີຍຄິດເພິ່ນວ່າ.

ເວລາລຸງບົວເຢີນເຮັດການປະຕິວັດບໍ່ເຄີຍຖືກເຈັບຈັກເທື່ອ, ແລະເພິ່ນກໍ່ບໍ່ຖືກສັດຕູຈັບໄດ້ຈັກເທື່ອ, ເພິ່ນໄດ້ໄປຢູ່ເຂດສັດຕູແຕ່ປອດໄພ ແລະ ກໍ່ບໍ່ເຄີຍຖືກເຈັບຈັກເທື່ອ ໝູ່ເພິ່ນກໍ່ຫຼາຍຢູ່! ຂະບວນມັນຫຼາຍ, ຂອງວ່າຂະບວນຂອງຊາວໜຸ່ມ. ອີງບົງນຳຫຼັງເພິ່ນໝົດຈຸນີ້, ເປັນຜູ້ທຳອິດກັບພວກລຸງມີທະຫານໝູ່ໜຶ່ງ ກັບພະນັກງານຂຶນຂວາຍ 9ຄົນ. ເວລານັ້ນຫຼັງຈາກຈິດໝາຍຂອງປະທານສຸພານຸວົງຊຽນ, ປະທານຄຳໄຕເອົາໄປໃຫ້ລຸງຟານວັນດົງ ເວລານັ້ນແຫຼະພວກເພິ່ນນີ້ໝວດທຳອິດຈາກນັ້ນ ເຂົາກໍ່ເຮັດຕໍ່ ໆ ໆ ໆ ກັນມາ. ຄັນຢູ່ທີ່ວປະເທດນີ້ເພິ່ນບໍ່ຮູ້ ແຕ່ສະເພາະເຂດທາງໃຕ້ນີ້ແມ່ນໜ່ວຍຂອງເພິ່ນນີ້, ຄົນຫວຽດນາມນີ້ຕີຢູ່ນີ້ທຳອິດກັບໝູ່ພວກເພິ່ນທະຫານ ໝູ່ໜຶ່ງກັບອ້າຍນ້ອງ 9ຄົນທຳອິດລະ. ຕໍ່ມາແມ່ນກຸ່ມອື່ນ, ຈັກກຸ່ມອີສັງມາຫຼາຍ.

ລຸງບົວເຢີນວ່າ: ໂອ້ຍ! ມັນກໍ່ເສຍຫຼາຍຫັ້ນແລ້ວທະຫານອາສາສະໝັກທຳອິດຂອງພວກເຮົາ, ຄືແມ່ນສະຫາຍທິວໜ້າກອງຮ້ອຍສະຫາຍຫວາງຕັ້ງຫວາງເປົາ, ຕໍ່ມາປີຊືນນີ້ກໍ່ສະຫາຍພັນໂທທິວໜ້າການເມືອງພວກເຮົານີ້. ນອກຈາກນັ້ນກໍ່ໝູ່ພວກເຮົາທີ່ຂຶນຂວາຍນຳກັນນີ້, ນີ້ເດຢູ່ໃນຮູບນີ້ກໍ່ມີຈຳນວນໜຶ່ງ, ຍັງແຕ່ສະຫາຍນີ້ແຕ່ຜູ້ເສຍນຳກັນຫຼາຍຄົນ.

ໃນໄລຍະນີ້ຂຶນຂວາຍຫັ້ນ ມີຜູ້ໃດທີ່ຖືກສັດຕູຈັບໄດ້. ນີ້ດຽວນີ້ເພິ່ນກໍ່ບໍ່ເຊື່ອໃຈ, ເວລາກຳລັງພວກເພິ່ນຊິແຕກ, ເວລາກຳລັງພວກເພິ່ນລົງໄປຫາແມ່ຂອງ, ລົງເຊກອງສອງຄົນຫັ້ນຫາຍຕົວບໍ່ເຫັນ. ຈັກແມ່ນສັດຕູຈັບຫຼືບໍ່, ແລະສະຫາຍໜຶ່ງ ຜູ້ຢູ່ແນວໜ້າຂອງພວກເພິ່ນນີ້ ແມ່ນເສຍແລ້ວກ່ອນພວກເພິ່ນຊິລົງເຊກອງນີ້ ລົງເຊກອງແລ້ວ ກັບມາຢູ່ກະເດິງ, ເບາະຢູ່ໃສບໍ່ຮູ້ພວກເພິ່ນ ຕີສັດຕູກໍ່ສະຫາຍໜຶ່ງເສຍ.

ສອງຄົນຫາຍຕົວ ແລະ ຜູ້ໜຶ່ງເຂົາວ່າໄປຍອມສັດຕູ, ແຕ່ບໍ່ຮູ້ຈັກບໍ່ຫານເວົ້າ, ແຕ່ວ່າສອງຄົນແຫລະບໍ່ເຫັນ, ກໍ່ບໍ່ໄດ້ຍິນຂ່າວຄາວພວກສອງສະຫາຍອັນ

ນັ້ນ. ມີແຕ່ຜູ້ໜຶ່ງຕາຍ, ກໍ່ຖືກບາດເຈັບພວກເພິ່ນກໍ່ຫາມໄປຕາຍຄືເພິ່ນເວົ້າທຳອິດ. ຊີວິດຂອງເພິ່ນກໍ່ຊ່ຳນັ້ນແຫຼະ ເພິ່ນເວົ້າແຕ່ຕົ້ນຕະຫຼອດປາຍດຽວນີ້ເພິ່ນບຳນານແລ້ວ.

ລຸງບົວເຍີນເວົ້າ: ມັນເປັນອັນໜຶ່ງທີ່ເຕືອນໃຈ. ດຽວນີ້ເພິ່ນກໍ່ເວົ້າຈິງໃຈກັບພະນັກງານຄົ້ນຄວ້າພວກເຮົາແນວນີ້: ຄຸນສົມບັດຂອງລຸງໄຮ່ເພິ່ນດຽວນີ້ກໍ່ຍັງຄ້ຳໄວ້ຄືເກົ່າ, ແມ່ນຍ້ອນຄວາມຕັກເຕືອນຂອງລຸງໄຮ່ ບໍ່ມີບັນຫາຄິດລັ່ງເລອີ່ຫຍັງ, ສະເພາະລຸງບົວເຍີນນີ້ເຫັນວ່າ: ຄຳເວົ້າຂອງລຸງໄຮ່ລະແມ່ນຫຼາຍຢູ່ດອກ, ໃນນີ້ລຸງໄຮ່ເວົ້າກ່ຽວກັບລາວກັບຫວຽດນາມ ກໍ່ຄືແຂ້ວກັບສົບເພິ່ນວ່າ: ຄັນບໍ່ມີຫວຽດນາມ ລາວກໍ່ຍາກ, ຄັນບໍ່ມີລາວ ຫວຽດນາມກໍ່ຊິຍາກ. ຈາກອັນນັ້ນຈຶ່ງມີເສັ້ນທາງໄຮ່ຈິມິນຫັ້ນ, ດຽວນີ້ຜູ້ນຳຂອງລາວພວກເຮົາກໍ່ເວົ້າດຽວນີ້ ຄັນພວກເຮົາບໍ່ເສຍເລືອດເນື້ອ, ເສັ້ນທາງນີ້ກໍ່ແມ່ນຫວຽດນາມກໍ່ຍາກຄືກັນ, ລາວພວກເຮົາກໍ່ຍາກຄືກັນ, ປະທານໄຮ່ຈິມິນກໍ່ເວົ້າເດຄຳກອນ: "ຫວຽດ-ລາວຮາຍເນືອກ ຈຸງຕາຕິ່ງຊາວເຮີນເນືອກຮີ່ງຮ່າກົ້ວລອງ[76]" ໝູ່ນີ້ຮູ້ຢູ່ດອກເຕືອນເລີຍໆ. ລຸງບົວເຍີນເມື່ອຮຽນມັນຊຸດທິດສະດີຊັ້ນສູງນີ້ ເກືອບຊິໄດ້ພົບລຸງໄຮ່, ແຕ່ສຸດທ້າຍລຸງບົວເຍີນໄດ້ພົບພໍ່ເຖົ້າຟາມວັນດົງ ເພິ່ນຍັງເປັນນາຍົກ, ເພິ່ນວ່າເພິ່ນຊິຕຽມໃຫ້ລຸງເຍີນພົບ, ແຕ່ວ່າລຸງໄຮ່ບໍ່ສະບາຍເວລານັ້ນ ເລີຍມອບໃຫ້ພໍ່ເຖົ້າຟາມວັນດົງທີ່ນັ້ນ. ແຕ່ຄວາມເວົ້າຫັ້ນລຸງໄຮ່ເວົ້າເລື້ອຍ ກັບພວກລຸງເຍີນເລື່ອງ ອາສາສະໝັກ ເລືອກຜູ້ຊາຍເອົາສາມສອກ.

ລຸງບົວເຍີນເວົ້າວ່າ: "ກໍ່ເຮັດໄດ້ອີ່ຫຼີ, ອີ່ສັງກໍ່ເຮັດສຳເລັດວຽກງານນີ້ໝູ່ມອບ, ໜັກກໍ່ເຮັດໄດ້, ເບົາກໍ່ເຮັດໄດ້, ບໍ່ຕິບໍ່ອີ່ສັງດອກ, ເຮັດໃຫ້ມັນແລ້ວແນວນັ້ນຈິດໃຈ! ລຸງເຍີນວ່າພັກເຮົາກໍ່ມີອັນເຕືອນຢູ່, ແຕ່ວ່າຄຳເວົ້າຂອງລຸງໄຮ່ນີ້ລຸງເຍີນຍັງຈື່, ນັບແຕ່ເພິ່ນຍັງຢູ່ພຸ້ນ ເວລາລຸງໄຮ່ຍັງມີຊີວິດ, ຂ້ອຍເຄື່ອນໄຫວກໍ່ຕິດຕາມຂ່າວຄາມເພິ່ນເວົ້າ, ຂອງຢາກຮັກສາໄວ້, ຄຸນສົມບັດ ບໍ່ເຮັດໂລເລ,

---

76 ພາສາລາວວ່າ:ຫວຽດລາວສອງຊາດພວກເຮົາມີຄວາມຮັກຄວາມແພງກັນເລິກກວ່າແມ່ນ້ຳຮົງວ່າແລະແມ່ນ້ຳຂອງ.

ເຮັດຄືໝູ່. ຈື່ດອກດຽວນີ້ໃນໃຈ, ຄັນເພິ່ນເຫັນອັນໃດໃນປະຈຸບັນນີ້ມັນຜິດເພິ່ນກໍ່ບໍ່ດີໃຈປານໃດ, ເລື່ອງຜິດເຖິງຂະໜາດນັ້ນໜາຊິບໍ່ຢູ່ໄດ້ສໍ່ານີ້, ແຕ່ວ່າດຽວນີ້ຈັກຈັ່ງໃດ ເສດຖະກິດຕະຫຼາດບໍ່ຈັກແນວໃດບໍ່ຮູ້, ແຕ່ວ່າຄືຊິບໍ່ມີດອກ, ມັນໝົດແລ້ວ, ມັນໝົດຍຸກຂອງມັນ, ບໍ່ມີທາງມີແຕ່ຊອກກິນຊອກຢູ່, ໄດ້ທໍ່ໃດເອົາທໍ່ນັ້ນເຮັດອັນນີ້ກໍ່ຢ່າສາ, ເພິ່ນວ່າມັນປອດໄພ, ເພິ່ນວ່າມັນຊິເປັນຄໍາຂວັນບໍ່ມີບັນຫາສັງຕິ ໂຕເປັນກໍາລັງໃຫ້ແກ່ການປະຕິວັດໃຫ້ແກ່ພັກ, ໃຫ້ແກ່ປະຊາຊົນ, ໝູ່ເອົາອັນໃດກໍ່ເອົາອັ້ນນັ້ນ. ກອງປະຊຸມອີ່ສັງຄັນໝູ່ບອກໃຫ້ໄປຮ່ວມກໍ່ໄປຮ່ວມ, ໝູ່ຂໍຄວາມເຫັນກໍ່ເວົ້າ, ຄັນບໍ່ມີອີ່ສັງກໍ່ແລ້ວ".

ປ້າມະນີວັນ ໂຄດຈັນດາ

ເຜົ່າມະກອງ

(ແຂວງ ສະຫວັນນະເຂດ)

ປະຈຸບັນປ້າມະນີວັນ ຢູ່ບ້ານທົ່ວເມືອງເໜືອ, ແຂວງສະຫວັນນະເຂດ, ເປັນຊົນເຜົ່າມະກອງ. ອາຍຸຂອງເພິ່ນປີນີ້ 72 ປີ. ປ້າມີລູກໜຶ່ງຄົນ ປ້າຢູ່ກັບລູກລ້ຽງຂອງເພິ່ນ. ແມ່ຂອງເພິ່ນຊື່ວ່າ ນາງງານ ລາວເສຍຊີວິດແຕ່ດົນແລ້ວ, ແຕ່ເວລາປ້າມະນີວັນ ຫາກະໄດ້ 7 ປີ. ພໍ່ຂອງເພິ່ນຕາຍເວລາເພິ່ນຍັງຢູ່ໃນທ້ອງແມ່. ປ້າມີເອື້ອຍນ້ອງຄີງໆ ນຳກັນ 3 ຄົນ ປ້າເປັນລູກຫຼ້າສຸດ, ສ່ວນຜູ້ອື່ນແມ່ນເສຍໝົດ, ບ້ານພວກເພິ່ນແມ່ນຢູ່ຂອນແກ່ນ ໃກ້ເຊທ່າມວກ, ດຽວນີ້ຍັງແຕ່ຜູ້ດຽວ ປ້າມະນີວັນ.

ແຕ່ໄລຍະຜ່ານມາ ຖານະຄອບຄົວ ແຕ່ພໍ່ແຕ່ແມ່ແຕ່ລຸງແຕ່ປ້າແຕ່ເກົ່າແຕ່ກ່ອນ, ແຕ່ພໍ່ເຖົ້າແມ່ເຖົ້າ ຊີວິດຄອບຄົວປ້າຫັ້ນ ກໍ່ພໍຢູ່ພໍກິນ, ຄັນວ່າຮັ່ງກໍ່ບໍ່ຮັ່ງ ຄັນວ່າທຸກກໍ່ບໍ່ທຸກ, ພໍຊ່ຳບ້ານຊ່ຳເມືອງ, ແລະເຂົ້ານ້ຳກໍ່ພໍໄດ້ກິນບໍ່ໄດ້ອຶດໄດ້ຢາກ. ງົວຄວາຍປ້າກໍ່ພໍໄດ້ແຕ່ເບື້ອງຫຼັງບໍ່ທັນໄດ້ເປັນເສິກເປັນເສືອ. ພວກເພິ່ນກໍ່ຢູ່ບ້ານ, ງົວຄວາຍເພິ່ນກໍ່ມີ. ພາຍຫຼັງທີ່ມີເສິກເກີດຂຶ້ນມາ ພວກເພິ່ນພາກັນປົບໜີເຂົ້າປ່າເຂົ້າດົງ, ປະບ້ານປະຊ່ອງ, ຍ້ອນສັດຕູ. ສັດຕູເວລານັ້ນມັນຢູ່ເມືອງພິນ, ເຊໂປນ, ນ້ຳຈະໂລະ ແລະ ເມືອງນອງ ມັນວ່າປ້າເຮັດການປະຕິວັດ, ເຮັດການທາງລັບ ແລະ ມັນກໍ່ວຸ້ນວາຍປະຊາຊົນຜູ້ທີ່ເປັນກອງຫຼອນ[77], ເວລານີ້ອາຍຸປ້າມະນີວັນໄດ້ 14 ແລ້ວ. ເວລານັ້ນຄອບຄົວຂອງເພິ່ນທຳມະດາ, ພວກປ້າມະນີວັນເວລານັ້ນເວົ້າຕົວຈິງ ພໍ່ແມ່ເພິ່ນຍັງ ປ້າລຸງເພິ່ນຍັງພວກເພິ່ນບໍ່ໄດ້ອຶດເຂົ້າ. ບາດເຄື່ອງນຸ່ງເຄື່ອງຖືປ້າກໍ່ເຮັດເອົາເອງ, ຊື້ເພິ່ນກໍ່ຊື້

---

77 ປ້າມະນີວັນ ອອກເຮັດການປະຕິວັດແຕ່ນ້ອຍ, ແຕ່ເວລາສອນສາວ, ບາດຮອດອາຍຸແກ່ແລ້ວລາວບໍ່ເອົາຜົວເລີຍ,ເອົາລູກພີ່ນ້ອງມາລ້ຽງ ແລະ ຢູ່ນຳລູກລ້ຽງ.

ທຳມະດາ, ເຫັນອັນໃດງາມພວກເພິ່ນຈຶ່ງຊື້ ອັນໃດບໍ່ງາມແຫລະພວກເພິ່ນບໍ່ໄດ້ຊື້, ພວກເພິ່ນຕ່ຳເອງ ງົວເພິ່ນບໍ່ມີ, ຄອບຄົວເພິ່ນແຕ່ເກົ່າມີແຕ່ຄວາຍລະຫວ່າງ 40 ປາຍໂຕ. ເວລານັ້ນເງິນຄ່ຳເຮືອນເພິ່ນບໍ່ໄດ້ຈ່າຍ, ເຮືອນເພິ່ນນີ້ ກໍ່ພື້ນແປ້ນທັ້ນແລ້ວ ຝາໄມ້ເຮັຍ. ເວລານັ້ນຖານະພໍ່ແມ່ຂອງເພິ່ນ, ແຕ່ກ່ອນກໍ່ປະຊາຊົນທຳມະດາ, ເພິ່ນເຮັດໄຮ່ເຮັດນາທຳມະດາ, ເຮັດນາແດ່, ເຮັດໄຮ່ແດ່ ກໍ່ຊິບໍ່ອຶດເຂົ້າໜາ. ໄລຍະໜຶ່ງແມ່ເພິ່ນເຈັບໄຊເປັນຫຼ່ອຍ. ເວລານັ້ນປີໜຶ່ງ, ພໍ່ລ້ຽງຂອງເພິ່ນເປັນຫຼ່ອຍເດ. ທຳອິດທັ້ນເພິ່ນລົ້ມ, ຢູ່ໃນຫ້ວຍລາວໄປອາບນ້ຳ, ແລ້ວລຸກບໍ່ເປັນເລີຍ, ພໍ່ເພິ່ນເປັນອຳມະພາດເລີຍ, ໝົດປີໜຶ່ງຈຶ່ງດີ. ເມື່ອເວລານັ້ນປ້າມະນີວັນໃຫຍ່ຂຶ້ນມາແລ້ວກໍ່ເຄີຍໄດ້ຕັກນ້ຳຕຳເຂົ້າ, ແຕ່ເວລາຕ່ຳຫູກເພິ່ນບໍ່ເປັນເພາະວ່າອາຍຸເພິ່ນໄດ້ 18 ປີ ອອກປ້າມະນີວັນອອກໄປນຳອິດສະຫຼະໂລດ.

ເວລາຍັງນ້ອຍເພິ່ນລ້ຽງງົວລ້ຽງຄວາຍ ເດືອນ 4-5 ພວກເພິ່ນລ້ຽງງົວລ້ຽງຄວາຍຕະຫຼອດ. ອ້າຍເພິ່ນມີສອງຄົນ, ເພິ່ນນີ້ເປັນນ້ອງຫຼ້າ, ພໍ່ແມ່ເພິ່ນກໍ່ຮັກໝົດທໍ່ນັ້ນ, ອ້າຍເອື້ອຍນ້ອງເພິ່ນກໍ່ບໍ່ໄດ້ຕີເພິ່ນຍ້ອນຄວາມຮັກ, ເພິ່ນບໍ່ເຄີຍຖືກຕີ ບໍ່ເຄີຍຖືກປ້ອຍບໍ່ເຄີຍຖືກດ່າ. ແຕ່ວ່າແມ່ເພິ່ນຕາຍທັ້ນ ເພິ່ນອາຍຸໄດ້ 7 ປີ ເພິ່ນຢູ່ນຳປ້ານຳລຸງແລ້ວ ເອົາປ້າເອົາລຸງເປັນພໍ່ເປັນແມ່, ເຂົາກໍ່ຮັກເພິ່ນ, ຖືວ່າປ້າລຸງເປັນພໍ່ເປັນແມ່, ເຂົາກໍ່ບໍ່ໄດ້ຮ້າຍເພິ່ນ, ມີຫຍັງເຂົາກໍ່ບອກສອນເພິ່ນ, ແລະເພິ່ນກໍ່ບໍ່ໄດ້ຮ້າຍປ້າລຸງ, ປ້າລຸງກໍ່ບໍ່ໄດ້ຮ້າຍເພິ່ນ, ເມຍອ້າຍຂອງເພິ່ນກໍ່ຄືກັນ ເຂົາບໍ່ເຄີຍຕີບໍ່ເຄີຍເວົ້າໃຫ້ເພິ່ນ.

ຄັນເວົ້າເຖິງເລື່ອງການຈັກສານຂອງປ້າມະນີວັນ ສານບຸງສານຕ່າສານສະຫວິງ ປະເພດນີ້ປ້າມະນີວັນບໍ່ເຄີຍຮຽນບໍ່ເຄີຍສານ ແລະ ຕອນໄປລ້ຽງງົວລ້ຽງຄວາຍເພິ່ນກໍ່ບໍ່ເຄີຍໄປຫາຢູ່ຫາກິນ, ເຄີຍສະປູສະປາແບບນັ້ນ, ໃສ່ເບັດ, ລ້ຽງງົວລ້ຽງຄວາຍໄປພ້ອມ, ຕຶກສະດຸ້ງກໍ່ເຄີຍ. ມາເຮືອນມາຊານເພິ່ນກໍ່ເຄີຍແຕ່ງຢູ່ແຕ່ງກິນຊ່ວຍປ້າລຸງ.

ປ້າລຸງເວລາຮ້າຍເຂົາກໍ່ຮ້າຍທັ້ນແຫລະຂອງປ້າມະນີວັນກໍ່ດີ້, ເວລາປ້າມະນີວັນໄປຫຼີ້ນໄປຫຍັງທັ້ນ ບາງເທື່ອປ້າລຸງກໍ່ຮ້າຍ ແລະປ້າມະນີວັນກໍ່ໄຫ້

ແລ້ວ. ບາດນີ້ໃຫຍ່ແລ້ວປ້າມະນີວັນເຄີຍສຳຜັດນຳໝູ່ນຳຄູ່ ເວລາມີບຸນ ເວລາເຮັດລະປີບ, ໄປຫັ້ນໄປແທ້, ແຕ່ວ່າເພິ່ນໄປນຳໝູ່ບໍ່ໄດ້ຜິດປົກກະຕິ, ໝູ່ຄູ່ໄປແນວໃດເພິ່ນກໍ່ໄປແນວນັ້ນ. ປ້າລຸງເພິ່ນກໍ່ບອກສອນສຳມະປີຫັ້ນແລ້ວ, ອັນໃດຊົ່ວອັນດີປ້າລຸງເພິ່ນກໍ່ບອກກໍ່ສອນແລ. ປ້າມະນີວັນກໍ່ລຳແລ້ວເວລາໄປລຳງິວລຳງຄວາຍ, ລຳຫັ້ນເພິ່ນລຳຕັ່ງຫວາຍ, ເພິ່ນມັກແລ້ວເວລາໄປບຸນ, ແລະເວລາໄປບຸນເພິ່ນກໍ່ໃສ່ເຄື່ອງຊົນເຜົ່າແລ້ວ, ນຸ່ງເຄື່ອງທຳມະດາແດ, ຖ້າວ່າໄປບຸນບໍ່, ໄປລະປີບຕອນແລງຫັ້ນເພິ່ນນຸ່ງເຄື່ອງຊົນເຜົ່າໂຕເອງ, ໝົດບຸນແລ້ວເພິ່ນຕ້ອງມາເຮັດວຽກເຮັດງານ, ບໍ່ໄດ້ໄປແຊງ ຊຳໆ ນຳໝູ່ນຳຄູ່, ປ້າມະນີວັນກໍ່ເຄີຍມີໝູ່ຄູ່ຜູ້ຍິງທີ່ຮັກແພງກັນທີ່ສຸດ, ໄປກໍ່ໄປນຳກັນ, ຕິດກັນອີ່ຫຼືອໍຫຼໍ ແລະແມ່ນນາງຈັນ, ດຽວນີ້ນາງຕາຍແລ້ວ. ເວລານັ້ນລາວກໍ່ເຮັດການປະຕິວັດນຳກັນ, ລັດປ່າລັດດົງໄປສົ່ງເຂົ້າໃຫ້ອິດສະຫຼະ, ລາວກໍ່ແມ່ນຊົນເຜົ່າກະຕາງຄືກັນນັ້ນແລ້ວ, ແຕ່ເຂົາເວົ້າວ່າພວກປ້າມະນີວັນເປັນຊົນເຜົ່າມະກອງ.

ຜູ້ທີ່ວ່າເຄີຍຮັກເຄີຍແພງນັ້ນລາວເຄີຍເວົ້າ. ໄປບຸນໄປທານໝູ່ຄູ່ປ້າມະນີວັນຫັ້ນກໍ່ມີ, ແຕ່ເຂົາເຄີຍບອກຄວາມຈິບຄວາມງາມຫັ້ນແລ້ວວ່າ: ເຮົາບໍ່ຄວນເຮັດແນວນີ້ແນວນັ້ນ ແຕ່ເພິ່ນວ່າບໍ່ເຄີຍລືມເລື່ອງສ່ວນຕົວ ເວລາພວກເພິ່ນຢູ່ສອງຄົນ, ບໍ່ໄດ້ລືມເລື່ອງເອົາລູກເອົາຜົວ, ມີແຕ່ລືມແນວອື່ນ. ຄັນວ່າເຮັດການປະຕິວັດນີ້ກໍ່ພ້ອມກັນເຮັດ, ພວກເພິ່ນເອົາເຂົ້າເອົານ້ຳໄປສົ່ງໃຫ້ອ້າຍນ້ອງທະຫານພະນັກງານຝ່າຍເຮົາຫັ້ນແຫລະ. ບາດນີ້ໝູ່ຜູ້ຊາຍຂອງເພິ່ນຫັ້ນທີ່ວ່າບໍ່ເປັນຊູ້ເປັນແຟນກັນ ແຕ່ວ່າຮັກແພງກັນຊ່ວຍເຫຼືອກັນ ຈົນກະທັ້ງອອກເຮັດການອິດສະຫຼະນຳກັນພັດບໍ່ມີໃດ, ເພິ່ນມີແຕ່ໝູ່ຜູ້ຍິງ, ເປັນຫົວໜ້າຈຸທົວໜ້າໜ່ວຍເພິ່ນຫັ້ນກໍ່ມີແຕ່ໝູ່ຜູ້ຍິງ. ຜູ້ຊາຍກໍ່ມີແຕ່ວ່າພວກເພິ່ນພົວພັນກັນທຳມະດາ, ແບບຄືອ້າຍຄືນ້ອງນີ້, ບໍ່ແມ່ນຊິຄືຜູ້ບ່າວຜູ້ສາວຄືແນວນັ້ນແຕ່ກ່ອນຫັ້ນ. ແຕ່ວ່າປ້າລຸງເພິ່ນເຄີຍບອກວ່າ ໃຫ້ເຈົ້າເບິ່ງໝູ່ເບິ່ງຄູ່ແນ່ເດີ. ເຂົາບໍ່ໄດ້ເວົ້າຕົງໆດອກເວລາເຂົາສອນມີແຕ່ເຕືອນລວມໆ, ເວົ້າແບບວ່າເຂົາປຽບໃສ່ຜູ້ນັ້ນຜູ້ນີ້, ເຂົາບໍ່ໄດ້ເວົ້າວ່າເຫັນດີໃຫ້ເອົາຜູ້ນັ້ນຜູ້ນີ້, ມີແຕ່ເຂົາເວົ້າລວມໆ. ຊູ້ແຟນເພິ່ນແຕ່ກ່ອນກໍ່ມີຢູ່,

ແຕ່ວ່າມີທຳມະດາຄືເຮົາເຈົ້າຂ້ອຍ. ໄລຍະນັ້ນອາຍຸປ້າມະນີວັນຫາກໍ່ໄດ້ 15 ປີ, ຮອດ ອາຍຸ 17-18 ປີ ເພິ່ນກໍ່ໄດ້ໄປເຮັດການປະຕິວັດເລີຍ.

ປ້າມະນີວັນບໍ່ໄດ້ປຶກສາ, ແຕ່ແນວຄິດເພິ່ນນີ້ຄິດຢາກໄປ, ເພິ່ນບໍ່ມັກສັດຕູ. ເພິ່ນບໍ່ມັກນີ້ໜຶ່ງລະແມ່ນວ່າ ອ້າຍຂອງເພິ່ນຖືກຈັບຢູ່ເຊໂປນສາມປີ, ແຕ່ປີ 1959 ຈົນຮອດປີ 1961, ຈຶ່ງໄດ້ອອກຈາກຄຸກ, ເຂົາຕີເຊໂປນ ອ້າຍເພິ່ນຈຶ່ງໄດ້ອອກຈາກຄຸກ. ສະນັ້ນເພິ່ນຈຶ່ງຄຽດ, ເພິ່ນຈຶ່ງຈຳໃຈຕ້ອງໄປອິດສະຫຼະ. ລຸງປ້າເພິ່ນນີ້ກໍ່ບໍ່ໃຫ້ເພິ່ນໄປແລ, ແຕ່ຕົນເອງເພິ່ນຕັດສິນໃຈໄປ ເອື້ອຍໃຫຍ່, ອ້າຍໃຫຍ່, ເຂົາກໍ່ບໍ່ຊ່າງຊິວ່າ. ນີ້ເພິ່ນຊິໄປ, ສັດຕູມັນຈັບອ້າຍຂອງເພິ່ນໄປໃສ່ຄຸກ, ແນວນັ້ນລະເພິ່ນຈຶ່ງວ່າຄຽດແລະເພິ່ນຈຶ່ງຕັດສິນໃຈໄປ. ເພິ່ນເຫັນສັດຕູເຕະຕີຊາວບ້ານຮອດ 10 ປາຍຄົນພຸ້ນ. ເພິ່ນລະຄຽດໂຕນັ້ນແຫລະເລີຍອອກ ປີ 1962.

ສຸດທ້າຍອ້າຍກັບລຸງຂອງເພິ່ນ, ກັບນ້າບ່າວຂອງເພິ່ນກໍ່ແມ່ນອິດສະຫຼະເຂົາອອກກ່ອນ. ເຂົາມາຢາມບ້ານ ແຫລະປ້າມະນີວັນຢາກໄປນຳເຂົາ, ຂອງມັນມີຜູ້ຍິງແນ່ 2 ຄົນມານຳ, ເພິ່ນເຫັນຈຸນັ້ນແລະຢາກໄປນຳເຂົາ, ຢາກໄປແນວນັ້ນລະເພິ່ນຕັດສິນໃຈໄປເອງ, ປ້າລຸງເພິ່ນບໍ່ໃຫ້ໄປ ເພິ່ນກໍ່ດື້ໄປ, ໄປແລ້ວຢູ່ກອງຂົນຂວາຍ. ໃນກອງຂົນຂວາຍນັ້ນມີອ້າຍ, ນ້າບ່າວຂອງເພິ່ນ, ແລະອ້າຍຂອງເພິ່ນ ສອງຄົນນັ້ນເຂົາບອກໝົດວ່າແນວນັ້ນຊົ່ວແນວນັ້ນດີ, ແນວນີ້ເຮົາຄຽດແຄ້ນ. ເຂົາສອນເລ່ກົນຂອງຈັກກະພັດມັນທຳລາຍປະຊາຊົນ ແນວນັ້ນແນວນີ້. ປ້າມະນີວັນກໍ່ເຫັນມັນຕີອ້າຍເພິ່ນເອງ. ເຂົາຈັບອ້າຍຂອງເພິ່ນໄປຂັງຄຸກເຊໂປນ, ອັນນັ້ນແລ້ວເພິ່ນຈຶ່ງວ່າຄຽດ, ພໍ່ຂອງເພິ່ນນີ້ແລ້ວສັດຕູເຕະຕີ, ລູກອ້າຍເພິ່ນສັດຕູຕີ. ປ້າມະນີວັນວ່າ: "ຕົນເອງເຮັດການປະຕິວັດ ໄດ້ປະກອບສ່ວນຜົນງານໃຫ້ພັກໃຫ້ລັດ, ໃຫ້ປະເທດຊາດ ແລະ ກໍ່ໃຫ້ປະຊາຊົນ, ແຕ່ວ່າຄວາມສຸກສ່ວນຕົວບໍ່ມີໃດ, ບໍ່ມີລູກບໍ່ມີຜົວ, ແຕ່ວ່າບໍ່ກິນແໜງຫຍັງກໍ່ເພິ່ງພໍໃຈຢູ່, ເພິ່ງພໍໃຈອັນໃດ ນີ້ເຮົາເຂົ້າພັກກໍ່ເຂົ້າແບບປິດລັບ, ຂອງພວກອ້າຍນີ້ເວົ້າວ່າ, ຖ້າເຂົ້າພັກແລ້ວ ຖ້າສັດຕູຈັບມັນຖາມວ່າ ໃຜເປັນພັກໃຜເປັນທິວໜ້າພັກ

ດງວນີ້ແມ່ນບໍ່ໃຫ້ບອກ, ເຂົາຂ້າແນວໃດກໍ່ຕາມ ເຂົາເຮັດແນວໃດກໍ່ຢ່າ. ໃຫ້ສະຫຼະໝົດທຸກສິ່ງທຸກຢ່າງເພື່ອປະເທດຊາດ , ເພື່ອປະຊາຊົນ".

ອ້າຍເພິ່ນບອກແນວນັ້ນ, ອ້າຍເພິ່ນເວົ້າແນວນັ້ນແລະເພິ່ນຈື່ເລີຍ, ເພິ່ນບໍ່ຄິດເລີຍເລື່ອງລູກເລື່ອງຜົວ ມີແຕ່ວ່າເພິ່ນຕັດສິນໃຈບໍ່ເອົາ, ເພິ່ນຈຶ່ງວ່າຢູ່ນຳລູກນຳຫຼານໄປສູ່ມື້ນີ້. ກ່ອນເພິ່ນຊິບໍ່ເອົາຜົວແມ່ນແນວນີ້, ປີ 1975-77-78 ເພິ່ນໄປຮຽນຢູ່ປາກເຊໄດ້ 3 ປີ, ໃກ້ຈະເສັງຈົບໂຮງຮຽນແລ້ວ ພວກເພິ່ນແຫຼະພາກັນໄປວັດພູຈຳປາສັກ, ຄືມື້ອື່ນມື້ຮືນີ້ຈະເສັງແລະໝູ່ພາເພິ່ນໄປວັດພູຈຳປາສັກເດ, ໄປແຫຼະເພິ່ນຍໍຂີ້ຫີນສ່ຽງໂຊກຢູ່ວັດພູ, ຫີນບໍ່ໃຫຍ່ທາງກາງຂອງມັນເປັນປ່ອງ, ຄວາມສູງຫີນອັນນັ້ນ ສອກໜຶ່ງ. ເຂົາພາເພິ່ນຍໍໂຕນັ້ນ ເພິ່ນສ່ຽງເບິ່ງວາດສະໜາໂຕເອງ. ເພິ່ນໄປແລຍໍ, ເພິ່ນຍໍທຳອິດກໍ່ອະທິຖານແລ້ວນໍເພິ່ນເອງວ່າ: "ຖ້າວ່າພັກລັດເຫັນດີນຳເຮົາ ຫຼືວ່າພັກລັດເບິ່ງແຍງເຮົາຮັກແພງເຮົາແມ່ນຍໍໃຫ້ຂຶ້ນ" ອັນທີສອງລະແມ່ນເພິ່ນອະທິຖານວ່າ : "ເຮົາເຮັດວຽກສຸດກຶກສຸດປາຍ ຂ້ອຍຍໍນີ້ໃຫ້ມັນຂຶ້ນ" ບາດນີ້ເພິ່ນຍໍລະຂຶ້ນວິດທິວ 3ເທື່ອ, ເພິ່ນລະຍໍແນວນີ້ບາດໃດກໍ່ວິດທິວໝົດສາມເທື່ອ. ແລ້ວເພິ່ນກໍ່ອະທິຖານອີກເລື່ອງການເປັນຄົນດີນີ້ແລະເພິ່ນກໍ່ຍໍວິດທິວໝົດ, ບາດວ່າເພິ່ນສ່ຽງເບິ່ງການເສັງນັ້ນກໍ່ໄດ້ຄືກັນວິດທິວໝົດ, ບາດເພິ່ນເບິ່ງການສ້າງຄອບຄົວນັ້ນ ເຮັດແນວໃດຄືນແນວໃດຈະສ້າງຄອບຄົວ, ເພິ່ນກໍ່ນຶກໃນໃຈໝົດ; ເອົາລູກເອົາຜົວນີ້ຍໍໃຫ້ມັນຂຶ້ນວິດທິວເດີ, ແນວນີ້ເພິ່ນອະທິຖານແລ້ວ ເພິ່ນຍໍບໍ່ຂຶ້ນເລີຍ, ເພິ່ນຍໍບໍ່ຂຶ້ນຈັກບາດ, ຈົນເພິ່ນໜ້າດຳຕາແດງເຫື່ອໄຫຼໄຄຍ້ອຍກໍ່ບໍ່ຂຶ້ນ, ເພິ່ນເອງຈົນອາຍໝູ່ທີ່ໄປນຳກັນ. ຍ້ອນແນວນີ້ແລ້ວເພິ່ນຈຶ່ງບໍ່ເອົາຜົວເລີຍ.

ເຫດຜົນທີ່ເຮັດໃຫ້ປ້າມະນີວັນເຄື່ອນໄຫວປະຕິວັດກັບອິດສະຫຼະ ກໍ່ຍ້ອນມີພະນັກງານຂົນຂວາຍມາແອບໃຫ້ເພິ່ນມີຈິດໃຈແນວນີ້: ອັນໜຶ່ງພໍ່ແມ່ເພິ່ນເອງກໍ່ບໍ່ມີ ເພິ່ນຢູ່ນຳປ້ານຳລຸງ. ປ້າລຸງເຂົາບໍ່ດ່າບໍ່ຊັງເພິ່ນດອກ. ເວລານັ້ນເພິ່ນຮູ້ສຶກວ່າອາຍຸເພິ່ນເອງໄດ້ 14 ປີ. ໃນປີ 1957 ເພິ່ນອອກມາໄຮ່ພົບບ້າບ່າວເພິ່ນເຮັດການແລ້ວ. ໄຄແມ່ລາວເວົ້າວ່າ: ນີ້ກໍ່ຄົນ, ຄົນອີ່ຫຍັງ? ຄົນພວກ

ສຽວພວກເອີຍ ທັ້ນລະຈັກ ແລະ ນາຍບ້ານທັ້ນ ຫາກວ່າຜູ້ໃດໃດກໍ່ບໍ່ຮູ້ວ່າຜູ້ມາຖາມ, ນັ້ນຖາມຮອດລູກເຂົ້າມາໃນບ້ານນີ້ແລ້ວ ລາວແອບປ້າມະນີວັນ ເທື່ອລະເລັກເທື່ອລະນ້ອຍເຊັ່ນວ່າ ພວກທະຫານພະນັກງານທາງລັບນັ້ນໜາ ລາວຈິດຊື່ແລ້ວໄປເວົ້າໂລດ ພາກັນຮຽນໂລດ ແລ້ວຮຽນການເມືອງ, ຮຽນສາມັກຄີແນວນັ້ນແນວນີ້ໂລດ ແລ້ວລາວເວົ້າວ່າ ເຈົ້າເຫັນຄົນຕ່າງໆມາ ເຈົ້າຢ່າເວົ້າເດີວ່າແຂກມາ ອິດສະຫຼະສັ່ງສອນລາວໄວ້ ນັ້ນລະຄືຈຸດເລີ້ມຕົ້ນທຳອິດ ອີ່ຫຼືອາຫຼໍຂອງປ້າມະນີວັນ ເວລານັ້ນນ້າບ່າວ ແລະ ອ້າຍນາຍບ້ານ ຂອງເພິ່ນເປັນຜູ້ຂະຫຍາຍເອົາ. ບາດນີ້ເພິ່ນຮູ້ແລ້ວວ່າ ແຈ້ງແລ້ວເພິ່ນຄິດຢາກເຮັດການປະຕິວັດຄືກຢາກຮຽນໜັງສື. ຕົ້ນຕໍນັ້ນຄື ອັນທີສອງນີ້ເພິ່ນຄິດວ່າມີບາງບ້ານທັ້ນ ສັດຕູຈັບແລ້ວເຂົາຕີເຂົາຂູ່, ຈາກນັ້ນ ປະຊາຊົນມີຄວາມຄຽດແຄ້ນຈຶ່ງເຮັດການປະຕິວັດ, ຄຽດເຂົາທຳລາຍຄົນໃນບ້ານ. ນ້າບ່າວເພິ່ນກໍ່ຖືກເຂົາຈັບ ອ້າຍເພິ່ນກໍ່ຖືກເຂົາຈັບແລ້ວຕີ. ເມື່ອເປັນແນວນັ້ນເພິ່ນຈຶ່ງຄິດຄຽດແຄ້ນສັດຕູ, ເພິ່ນບໍ່ທັນໄດ້ຮູ້ຝຣັ່ງ ອາເມລິກາແມ່ນຫຍັງ. ເພິ່ນຮູ້ແຕ່ຄິດຄຽດ ເລີຍເຂົ້າເຮັດການປະຕິວັດ! ມື້ເພິ່ນເຂົ້າເຮັດການປະຕິວັດແທ້ແມ່ນມື້ວັນທີ 20 ເດືອນ 7 ປີ 1957[78]. ເພິ່ນເຂົ້າແທ້ແມ່ນເພິ່ນເອົາເຂົ້າເອົານ້ຳໄປສົ່ງໃຫ້ທະຫານພະນັກງານ! ເວລາເຂົ້າມາຢູ່ໃນບ້ານແລ້ວ ເພິ່ນເປັນຜູ້ຮອງຫົວໜ້າເຂົາ ເອີ້ນວ່ານັກຮົບເພິ່ນເປັນຮອງ. ອັນດັບສອງ ແມ່ນເຂົາໃຫ້ເພິ່ນ ເປັນຜູ້ສົ່ງເອກະສານ ສົ່ງຂ່າວທາງລັບ, ເພິ່ນທັງສັງເກດການກຳສະພາບຂອງສັດຕູ ຢູ່ໃນເມືອງພິນ, ຢູ່ພະລານ, ເພິ່ນກໍ່ກຳເອົາ ຈຳນວນສັດຕູຫຼາຍປານໃດ ຢູ່ໃນເມືອງພິນ (ສືບຂ່າວສົ່ງຂ່າວ) ປ້າມະນີວັນໄປເອົາໄດ້ສາມເທື່ອ. ເມື່ອໄດ້ຈຳນວນສັດຕູແລ້ວເພິ່ນໃຫ້ອ້າຍຄຳຫຼ້າ (ເວລານັ້ນ ລາວເປັນທະຫານສັດຕູຢູ່ພະລານ, ແຕ່ວ່າທາງເຮົາລາວກໍ່ເຮັດ) ປ້າມະນີວັນໄປສືບຂ່າວເອົານຳລາວທັ້ນ, ກັບນ້າບ່າວເພິ່ນຊຽງລີ. ດຽວນີ້ລາວຕາຍ

78 ວັນທີ 20 / 7 / 1957 ປ້າມະນີວັນ ເວລານີ້ອາຍຸ 14 ປີ ໄດ້ອອກເຄື່ອນໄຫວລັບນຳພວກພະນັກງານ ອິດສະຫຼະໃນເຂດບ້ານຂອງຕົນ. ແຕ່ວ່າຮອດປີ 1962 ເພິ່ນໃຫຍ່ອາຍຸໄດ້ 17-18 ປີແລ້ວ, ພາຍຫຼັງທັນທີດແລ້ວເພິ່ນອອກຈາກຄອບຄົວເລີຍ ຈົນເຖິງປະຈຸບັນນີ້.

ແລ້ວ, ປ້າມະນີວັນກໍ່ເອົານຳລາວທັ້ນໄດ້ຈຳນວນປືນນ້ອຍແລະປືນໃຫຍ່, ຈຳນວນສັດຕູແລ້ວກໍ່ເມືອ, ສັດຕູເຂົາບໍ່ໄດ້ຮູ້ຫຍັງດອກ ເວລານັ້ນ ອາຍຸ ປ້າມະນີວັນຫາກໍ່ 14ປີ. ໄລຍະປີ 1957-58-59 ແມ່ນວ່າເພິ່ນກຳສະພາບ ຂອງສັດຕູໄດ້ແລ້ວມາລາຍງານໃຫ້ທະຫານ ພະນັກງານຂອງຝ່າຍເຮົາ. ອັນທີສາມ: ເວລາສັດຕູເຂົ້າບ້ານສັດຕູ ມາແຕ່ເມືອງພິນ ຫຼືມາແຕ່ພະລານຂຶ້ນໄປໃນບ້ານ. ປ້າມະນີວັນສົ່ງເຂົ້າໃຫ້ພະນັກງານທີ່ເຄື່ອນໄຫວຢູ່ຕາມປ່າຕາມດົງ, ຈຸດຕົ້ນຕໍ ລະແມ່ນດົງກະເພາະ. ນັ້ນກໍ່ຄືໄລຍະເພິ່ນເຄື່ອນໄຫວປະຕິວັດແລ້ວ. ອີດນັ້ນເຂົາໃຫ້ເພິ່ນເຮັດສິລະປະ (ຮ້ອງເພງ, ຟ້ອນລຳ), ເຂົາໃຫ້ເພິ່ນເຮັດໂຕນັ້ນ. ປີ 1958 ແມ່ນປ້າມະນີວັນຢູ່ນຳທະຫານພະນັກງານໃນດົງກະເພາະ, ເພາະວ່າເສຍລັບ ຊື່ເພິ່ນເວລານັ້ນເອີ້ນວ່າ: ຊີລີບ ເສຍລັບແລ້ວ ປ່ຽນເພິ່ນຊື່ວ່າ ມະນີວັນ. ຊື່ເພິ່ນທີ່ພໍ່ແມ່ເພິ່ນຕັ້ງຊື່ໃຫ້ແມ່ນສິມສະໜິດ[79]. ໃນປີ 1958 ປ້າມະນີວັນເອົາເຂົ້າເອົານ້ຳໄປສົ່ງໃຫ້ອິດສະຫຼະ ມີສະພາບຫຍັງເພິ່ນກໍ່ລາຍງານໃຫ້ພະນັກງານທະຫານເລີຍຈົນຮອດປີ 59. ເວລາປີ 58 ທັ້ນ ພະນັກງານໄດ້ເຂົ້າມານອນໃນເຮືອນ ນອນຢູ່ປ່າແດ່ ຖ້າສະພາບຮ້ອນກໍ່ນອນຢູ່ປ່າ, ຖ້າສະພາບບໍ່ຮ້ອນກໍ່ມານອນຢູ່ເຮືອນ, ເມື່ອຮອດປີ 1959. ແມ່ນສະພາບຮ້ອນແຮງທີ່ສຸດເຂົາຈັບເອົາອ້າຍເພິ່ນຈັບເອົານ້າບ່າວເພິ່ນໃນບ້ານ ກໍ່ສັດຕູຊິຈັບແມ່ນວ່າສັດຕູເມືອແຕ່ສະຫວັນ ໄປຈ່າຍເຄື່ອງໃຫ້ທະຫານຢູ່ເມືອງພິນແລະເຊໂປນ, ອ້າຍນ້ອງທະຫານຝ່າຍເຮົາຍິງເຂົາແລະເລີຍເສຍລັບ, ເພາະລົດຂອງເຂົາເອົາເຄື່ອງໄປຈ່າຍໃຫ້ທະຫານສັດຕູຢູ່ເມືອງພິນແລະເຊໂປນ. ບ້ານພວກເພິ່ນເປັນຜູ້ໄປເອົາ, ມັນເລີຍເປັນຮ້ອນເລີຍປົບໄປ. ນາຍບ້ານທັ້ນເຂົາສືບໄດ້ເຂົາຈັບຂູ່ເຕະຕີທໍລະມານ. ເມື່ອເປັນເຊັ່ນນັ້ນ ພວກເພິ່ນກໍ່ອອກຈາກບ້ານຢູ່ນຳພະນັກງານທະຫານອິດສະຫຼະໃນດົງກະເພາະ ເລີຍເຂົາຈັບອ້າຍເພິ່ນແລ້ວ ເພິ່ນເລີຍເຄື່ອນໄປຢູ່ນຳທະຫານອິດສະຫຼະຢູ່ພູຢູ່ຜາເລີຍ ປີ 1961 ພໍດີເຂົາຕີເມືອງພິນ, ປິດ

[79] ຊື່ພໍ່ແມ່ຕັ້ງໃຫ້ທ່ານອິດນັ້ນ ແມ່ນ ນາງ ສິມສະນິດ, ເວລາເຄື່ອນໄຫວນຳອິດສະຫຼະເອີ້ນວ່າ ນາງຊີລີບ,ເມື່ອເສຍລັບຈຶ່ງປ່ຽນຊື່ ແລະ ເອີ້ນວ່າ ນາງ ມະນີວັນ ເທົ່າສູ່ມື້ນີ້.

ປ່ອຍເມືອງພີນ, ເຊໂປນເວລານັ້ນ ເພິ່ນກໍ່ກັບມາ ຢູ່ໃນເຮືອນແລ້ວ ເພິ່ນກໍ່ເຮັດການຄືກັນ ຂົນສົ່ງລຳລຽງໄປແຖວເມືອງພີນ ເອົາເຂົ້າເອົາລູກປືນໄປໃຫ້ອ້າຍນ້ອງຢູ່ປິດຄ້າຍທີ່ເມືອງພີນ. ພໍດີປີ 1962 ເພິ່ນກໍ່ອອກເບິ່ງນ້ຳບ່າວເພິ່ນ ແລະເມືອເອົາອ້າຍເມືອ, ປ້າລຸງເພິ່ນບໍ່ໃຫ້ເພິ່ນໄປ ແຕ່ກໍ່ຢາກໄປ ຢາກໄປນັ້ນໜຶ່ງແມ່ນເພິ່ນຄຽດແຄ້ນສັດຕູ ອັນສອງແມ່ນເພິ່ນຢາກຮຽນ ເວລານັ້ນໜັງສືກໍ່ບໍ່ເປັນ.

ປ້າມະນີວັນ ໄດ້ສະຫຼະ ອອກຈາກຄອບຄົວ ວັນທີ 25 ເດືອນ 6 ປີ 1962, ເພິ່ນໄດ້ອອກຈາກບ້ານໄປຢູ່ປ່າຢູ່ກອງຂົນຂວາຍຂອງແຂວງ, ເພິ່ນໄປນຳນ້ຳບ່າວໄປນຳອ້າຍ, ເວລາເພິ່ນໄປຢູ່ນຳກອງຂົນຂວາຍ ເຂົາໃຫ້ເພິ່ນໄປຢູ່ນຳຕາແສງ ນ້ຳຈະໂລະ ອ່າງຄຳ. ປ້າມະນີວັນ ໄປນຳເອື້ອຍເພິ່ນ ຜູ້ທີ່ໄປກ່ອນໄປຢູ່ຫັ້ນ ປະຊາຊົນອອກຖາງໄຮ່ ເພິ່ນກໍ່ໄປນຳເຂົາ, ເພິ່ນຕຳເຂົ້າຕັກນ້ຳນຳເຂົາ, ເພິ່ນໄປຫາກິນຫາຢູ່ນຳເຂົາ, ເພິ່ນໄປນຳເດັກນ້ອຍແດ່ ຜູ້ໃຫຍ່ແດ່ ໄປຫາໜໍ່ໄມ້ຍອດຫວາຍຍອດສານ. ເດັກນ້ອຍເວົ້າໃຫ້ເພິ່ນແນວນັ້ນແນວນີ້ລະ, ເພາະເດັກນ້ອຍເຂົາເຫັນເຂົາຮູ້, ເພາະຝ່າຍພວກເຮົາປົດປ່ອຍປີ 61 ປະຕິການເຂົາຢູ່ຕາມທົ່ງ, ເຂົາກໍ່ຢູ່ຕາມປ່າຕາມດົງ. ພວກເດັກນ້ອຍເຂົາຮູ້ວ່າຜູ້ອ້າຍໄປເປັນປະຕິການກໍ່ມີ, ຜູ້ນ້ອງຊາຍໄປກໍ່ເປັນປະຕິການມີ, ຜູ້ຜົວໄປກໍ່ມີ. ເວລາປ້າມະນີວັນໄປຫາກິນນຳເດັກນ້ອຍເຂົາບອກໃຫ້ຮູ້: ພໍ່ພວກເຂົາຢູ່ຫັ້ນຢູ່ນີ້ ເດັກນ້ອຍເຂົາເວົ້າສູ່ເພິ່ນຟັງ: ຢູ່ເວລານີ້ແມ່ນພວກຂ້ອຍຕ້ອງຢູ່ທຸກແທນໃຫ້ພໍ່ພວກຂ້ອຍ ພໍ່ພວກຂ້ອຍຢູ່ຈອກພູນີ້ ຕີນພູໂຕນີ້ ... ໄດ້ຍິນແນວນັ້ນເພິ່ນກໍ່ລາຍງານໃຫ້ນ້ຳບ່າວເພິ່ນຜູ້ເປັນຫົວໜ້າຂົນຂວາຍແນວນັ້ນ, ບາງເທື່ອເພິ່ນກໍ່ພົບຜູ້ເປັນນັກສືບ, ເຂົາບອກແຕ່ເດັກນ້ອຍ, ບາງເທື່ອຜູ້ໃຫຍ່ເພິ່ນກໍ່ບອກ, ຜູ້ທີ່ກຳພ້າກຳພອຍແມ່ຮ້າງ ແມ່ໝ້າຍ ເຂົາກໍ່ບອກປ້າມະນີວັນ.

ໃນປີ 1962-1965 ແມ່ນປ້າມະນີວັນເຄື່ອນໄຫວໄປນຳໝູ່ຄູ່ ປີ 1967-1968 ແມ່ນເພິ່ນໄປຜູ້ດຽວ, ເຂົາແຕ່ງຕັ້ງໃຫ້ເພິ່ນໄປເກັບເຂົ້າຊ່ວຍຊາດ, ໄປລະດົມເອົາເດັກນ້ອຍໄປຮຽນ, ລະດົມເອົາໄປເປັນຄູ, ເປັນແພດ, ເປັນໝໍ,

ເປັນທະຫານ ແຕ່ບໍ່ແມ່ນເພິ່ນຜູ້ດຽວ ກໍ່ມີຫຼາຍຄົນ ຫຼາຍພາກສ່ວນໄປນຳກັນ, ເຮັດນຳກັນ, ຕົ້ນຕໍແລ້ວແມ່ນໄປເຮັດໄຮ່ ເຮັດສວນ, ຖາງໄຮ່ແລ້ວຕອນແລງກໍ່ເມືອ. ເວລາເມືອເພິ່ນກໍ່ເອົາຫຼິ້ວເມືອ, ກິນເຂົ້າແລງແລ້ວເພິ່ນກໍ່ດັງຫຼີ້ວພາເຂົາຟ້ອນພາເຂົາລຳ. ຈຸຊາວໜຸ່ມບ້ານປ່າ, ບ້ານນ້ຳຈະໂລະບໍ່ໄດ້ຫຍັງ, ເຂົາໄປໝົດຜູ້ຊາຍກໍ່ໄປຜູ້ຍິງກໍ່ໄປ ເຂົາໄປເປັນທະຫານພະນັກງານ ເປັນແພດເປັນໝໍເປັນຄູ... ປ້າມະນີວັນນີ້ ເຮັດແນວນັ້ນຢູ່ກອງຂົນຂວາຍ, ເພິ່ນໄປກໍ້ງເກືອກລີເລືອ, ແຕ່ວ່າຂັ້ນເທິງຫຼືວ່ານ້ຳບ່າວຢູ່ໃນຫັ້ນຄັດເລືອກເອົາປ້າມະນີວັນ ແຕ່ລະປີເພິ່ນໄດ້ໃບຍ້ອງຍໍຂອງແຂວງບໍ່ໄດ້ຂາດ. ຜູ້ໃດກໍ່ເຫັນດີຜົນງານຂອງເພິ່ນ ເນື່ອງຈາກວ່າ ເພິ່ນເປັນຜູ້ນ້ອຍແຕ່ດຸໝັ່ນຕັກນ້ຳຫາຟືນບໍ່ໄດ້ພັກໄດ້ເຊົາ. ບ່ອນໃດທຸດບ່ອນໃດເປັນແມ່ຮ້າງກຳພ້າກຳພອຍ, ບ່ອນນັ້ນເພິ່ນຢູ່, ເພິ່ນບໍ່ໄດ້ຢູ່ຈັກເທື່ອນຳຄົນຮັ່ງແນວນັ້ນ ເວລາເພິ່ນຢູ່ກອງຂົນຂວາຍແຕ່ປີ 1962-1968 . ຮອດປີ 1968 ແມ່ນປ້າມະນີວັນເປັນຊາວໜຸ່ມແຂວງ, ຄະນະຊາວໜຸ່ມແຂວງ. ໄລຍະເພິ່ນຢູ່ຊາວໜຸ່ມຫັ້ນ ກໍ່ເຮັດໜ້າທີ່ຂົນຂວາຍຄືກັນ. ປ້າມະນີວັນລະດົມນັກຮຽນລະດົມເດັກນ້ອຍ ອາຍຸ 8 ປີ - 11 ປີ ສົ່ງໃຫ້ໄປຮຽນຢູ່ຫວຽດນາມ, ເດັກນ້ອຍທີ່ເພິ່ນໄດ້ລະດົມໄປຮຽນ ດຽວນີ້ຜູ້ເປັນແພດກໍ່ມີ ຜູ້ເປັນເຈົ້າເມືອງກໍ່ມີເປັນທະຫານກໍ່ມີ ຄືແນວນັ້ນ ເວລາຢູ່ຊາວໜຸ່ມ ແຕ່ປີ 68-69. ປີ 70 - 72 ເພິ່ນລະດົມພວກທະຫານນັກຮຽນ, ພວກທະຫານເກົ່າອິດສະຫຼະທີ່ເມືອບ້ານໃຫ້ກັບຄືນກົມກອງເກົ່າ, ໄລຍະນັ້ນກັນດານ, ໄລຍະປີ 68-69 ຈຸທະຫານອິດສະຫຼະເຮົາມີຄວາມຄຽດແລະກັບເມືອຢູ່ບ້ານ, ຈົນເຂົາຢາກຍິງຢາກຂ້າປ້າມະນີວັນນີ້ຖິ້ມ, ແຕ່ມີຜູ້ບອກປ້າມະນີວັນ ເຂົາວ່າລະວັງໃດຈັກໜ່ອຍເຈົ້າຕາຍໃດ, ເຈົ້າເປັນຜູ້ຍິງຊ້ຳອີກ. ປືນກະລາບິນເພິ່ນຖືກເວລານັ້ນ, ເຂົາພັດເປັນທະຫານເກົ່າເຂົາເມືອຢູ່ບ້ານ ເຈົ້າພັດໄປລະດົມເຂົາຈັກໜ່ອຍເຈົ້າຕາຍໃດ, ດຽວນີ້ມີຜູ້ຢາກຂ້າເຈົ້າປະຊາຊົນບອກ, ຍາມເດືອນ 9 ເດືອນ 10 ຍົນກໍ່ຍິງ ຝົນກໍ່ຕົກນ້ຳມາກ ຜູ້ດຽວເພິ່ນພາເຂົາໄປເອົາທະຫານເກົ່າໄປນຳ ເພິ່ນສອງຄົນມີແຕ່ຄົນ

ອື່ນບໍ່ແມ່ນບ້ານເຂົາເຈົ້າແຕ່ປະຊາຊົນບ້ານຂອບເຂດທັ້ນລະເປັນຜູ້ບອກປ້າມະນີວັນວ່າເຂົາຢາກຂ້າເພິ່ນຄືແນວນັ້ນ ໄລຍະຢູ່ຊາວໜຸ່ມ.

ປີ 70 ປ້າມະນີວັນ ໄປຢູ່ນຳທະຫານຂົນຂວາຍ, ກອງທະຫານທີ່ເພິ່ນຢູ່ນຳທັ້ນແມ່ນກອງພັນທີ 14 ຢູ່ທາງລະຫານ້ຳສອງຄອນບ່ອນກັນດານ. ແມ່ຍິງຜູ້ດຽວເພິ່ນຢູ່ນຳທະຫານ, ເຂົາໃຫ້ເພິ່ນໄປຢູ່ນຳປະຊາຊົນຢູ່ບ້ານເພິ່ນກໍ່ໄປຢູ່ໝົດປີ 70, ປ້າມະນີວັນອອກຈາກຄະນະຊາວໜຸ່ມມື້ນັ້ນແລ້ວເພິ່ນເຂົ້າເປັນຄະນະເພດຍິງປີ 70, ເພິ່ນຢູ່ນຳທະຫານ, ທະຫານເປັນຜູ້ເຄື່ອນໄຫວແລະຕີສັດຕູ, ເພິ່ນນີ້ເປັນຜູ້ໂຄສະນາຂົນຂວາເອົາພວກທີ່ໄປນຳສັດຕູແຕ່ເກົ່າ ທີ່ຍັງບໍ່ທັນໄດ້ອອກມາໃຫ້ເຂົາກັບມາ. ປີ 71-72-73 ແມ່ນໄປຮຽນຢູ່ຫວຽດນາມ 2 ປີ 6 ເດືອນ. ໄລຍະເພິ່ນໄປຮຽນຢູ່ຫວຽດນາມນັ້ນ, ເພິ່ນເປັນຫົວໜ້າສະຫະພັນແມ່ຍິງເມືອງພະລານໄຊ, ປ້າມະນີວັນຢູ່ເມືອງພະລານໄຊນີ້ກໍ່ມີແຕ່ໄປຂົນຂວາຍປຸກລະດົມໂຄສະນາກັບໂຄສະນາບໍ່ໄດ້ຢຸດເລີຍ.

ປີ 1975 ປ້າມະນີວັນກັບມາແຕ່ຫວຽດນາມ ເພິ່ນຢູ່ໄດ້ສາມເດືອນ ກໍພໍດີຍຶດອຳນາດ, ເພິ່ນລົງມາສະຫວັນນະເຂດເລີຍ. ໄລຍະເພິ່ນມາຢູ່ສະຫວັນທີ່ຖືກຍຶດອຳນາດແລ້ວນັ້ນ ແມ່ນເພິ່ນໄດ້ລົງເລີກໂຄສະນາຂົນຂວາຍພວກທີ່ເປັນແມ່ຈ້າງນາງເລງໃຫ້ເລີກອາຊີບພວກນີ້, ເພື່ອເອົາພວກນີ້ໄປດັດສ້າງຢູ່ເມືອງພິນ. ຫຼັງຈາກປ້າມະນີວັນຢູ່ສະຫວັນນະເຂດໄດ້ສາມເດືອນ, ຍຶດອຳນາດແລ້ວເພິ່ນກໍ່ຍ້າຍໄປຢູ່ເມືອງ, ຢູ່ບ້ານນ້ຳສຸລິຍະ ໃນປີ 1975. ປ້າມະນີວັນຢູ່ທັ້ນສອງເດືອນ (ເມືອງເລົ່າສຸລິຍະ). ຮອດປີ 76 ເພິ່ນໄປຢູ່ເມືອງສອງຄອນ, ເພິ່ນຢູ່ເມືອງສອງຄອນກໍ່ແມ່ນວ່າລົງພື້ນຖານ, ບ່ອນນັ້ນແມ່ນບ່ອນກັນດານໄລຍະເພິ່ນໄປຢູ່ເມືອງສອງຄອນ. ໄລຍະນັ້ນກັນດານທີ່ສຸດປາກົດວ່າປະຕິການກໍ່ເກີດຂຶ້ນເປັນບາງຄັ້ງ, ເກີດຂຶ້ນຢູ່ທັ້ນໂລດ. ໄລຍະນັ້ນອ້າຍນ້ອງພວກເຮົາຕາຍລຽນຕິດ, ທະຫານຝ່າຍຂອງພວກເຮົາກໍ່ຕາຍ, ຕຳຫຼວດກໍ່ຕາຍ, ແລ້ວປ້າມະນີວັນເອງຮັບຜິດຊອບຕາແສງສີ່ແຍກ ໄປເອົາເງິນໃຫ້ເຂົາປຽນ ແລະ ກໍ່ແມ່ນວ່າໃຫ້ເພິ່ນເອົາສອງຕາແສງນີ້: ຕາແສງທີ່ໜຶ່ງແມ່ນຕາແສງສອງຄອນ, ຕາແສງທີ່

ສອງແມ່ນຕາແສງສີ່ແຍກໃຫ້ເພິ່ນຖືໄປ, ທະຫານເມືອງນ້ອຍໆຫາກໍ່ອອກແຕ່ຄອບຄົວພຽງສາມເດືອນໃຫ້ໄປນຳປ້າມະນີວັນ ແຕ່ສອງຄົນເອົາເງິນໄປ ສ່ວນເພິ່ນນີ້ສະຫຼະບອກໝູ່ຄູ່ນຳກັນໄວ້ວ່າ: "ພວກຫຼານເອີຍ, ພວກນ້ອງເອີຍ!, ດຽວນີ້ໃຫ້ພວກເຈົ້າເອົາເຄື່ອງຂອງໄປໃສ່ຫີບ, ມື້ໃດຂ້ອຍຕາຍແລ້ວສິ່ງໃຫ້ພໍ່ແມ່ໃຫ້ເອື້ອຍໃຫ້ນ້ອງຂ້ອຍ". ເພິ່ນໄດ້ສະຫຼະໄປກໍ່ໃຫ້ສັດຕູຈັບ, ເພິ່ນກໍ່ວ່າສັດຕູຍິງ, ກໍ່ວ່າປະຕິການຍິງໃນເຮືອທັ້ນເພິ່ນຊິໂຕນເລີຍ. ຂອງວ່າຄະນະເມືອງເວົ້າໃຫ້ເພິ່ນວ່າ ຄັນວ່າເງິນເສຍກະໂຕເຈົ້າກໍ່ຄໍຂາດ, ຄັນວ່າເຈົ້າແລະເງິນຍັງກໍ່ແມ່ນດີ! ນັ້ນແລ້ວເພິ່ນຈຶ່ງສະຫຼະໝົດ, ເພິ່ນເອົາເງິນໃສ່ໃນບາໄລນີ້ສາມລ້ານ, ເພິ່ນເອົາລູກປືນໃສ່ໃນກະໂຕນີ້, ຄັນວ່າສັດຕູຫຼືວ່າປະຕິການຍິງໃນເຮືອນີ້ ແມ່ນເພິ່ນຊິໂຕນຈົມນ້ຳເລີຍ. ປ້າມະນີວັນຄິດວ່າແນວນັ້ນອັນໃຈເດັດດຽວນັ້ນ. ເພິ່ນປະຕິບັດຕາມຄຳສັ່ງກະວ່າຕາຍກໍ່ຢ່າ, ແຕ່ວ່າບຸນເພິ່ນຄືວ່າທັ້ນແລ້ວ, ຈັກບຸນຈັກບາບ, ເພິ່ນຜ່ານຕະຫຼອດ ເພິ່ນບໍ່ໄດ້ພົບກັບປະຕິການບໍ່ໄດ້ພົບຫຍັງເລີຍ. ອ້າຍນ້ອງຝ່າຍພວກເຮົາຕາຍຄືມື້ນີ້, ຕອນເຊົ້າພວກເພິ່ນໄປ. ຄ່າແຕ່ນັ້ນມາແມ່ນບໍ່ໄດ້ຂາດເລີຍພວກປະຕິການ. ທະຫານຝ່າຍພວກເຮົາໄປເຂົາກໍ່ຍິງ, ພະນັກງານຝ່າຍພວກເຮົາໄປເຂົາກໍ່ຍິງ, ໄລຍະນັ້ນແມ່ນປຽນເງິນປົດປ່ອຍກັບເງິນວຽງຈັນ, ເງິນມີເຈົ້າຊີວິດອັນນັ້ນແມ່ນວ່າໄລຍະໜຶ່ງ. ໄລຍະທີ່ສອງແມ່ນວ່າປຽນເງິນປົດປ່ອຍກັບເງິນທະນາຄານ. ປີ 1979 ອັນນີ້ແມ່ນວ່າປ້າມະນີວັນໄປທາງທ່າປະຊຸມ, ເພິ່ນໄປທາງເຂດຊາຍແດນລາວໄປອີກ, ໄປຮັບຜິດຊອບສາມຕາແສງໄລຍະນັ້ນແມ່ນກັນດານທີ່ສຸດ. ທະຫານລາວທະຫານຫວຽດນາມໄປນຳ ແລະປ້າມະນີວັນໄປເວລານັ້ນວຸ່ນອີ່ຫຼືອໍຫຼໍ ວຸ່ນທາງເໜືອ, ເຂົາໃຫ້ປ້າມະນີວັນໄປທາງເໜືອ ວຸ່ນທາງໃຕ້ເຂົາໃຫ້ປ້າມະນີວັນໄປທາງໃຕ້ ເພິ່ນກໍ່ໄປບໍ່ແມ່ນແນວຜິດອີ່ຫຍັງເພິ່ນກໍ່ວ່າຕາຍມື້ໃດກໍ່ຢ່າເພິ່ນຄິດວ່າ: "ຕ້ອງຕາຍນຳປະຕິວັດ, ມັນສະໝັກແລ້ວເດ, ເພິ່ນເວົ້າວ່າເຮັດການປະຕິວັດນີ້ແມ່ນເພື່ອຊາດເພື່ອປະຊາຊົນ, ເພື່ອຊີວິດຂອງພໍ່ແມ່ປະຊາຊົນ, ກູ້ເອົາຊີວິດຂອງພໍ່ແມ່ປະຊາຊົນ, ຂອງວ່າມັກແລ້ວເດ". ເຂົາໃຫ້ເພິ່ນໄປທາງໃດກໍ່ໄປໂລດ, ເພິ່ນບໍ່ໄດ້ຕົກສະທ້ານຍ້ານກົວອີ່ຫຍັງ,

ແຕ່ວ່າເພິ່ນວິດອຸປະສັກ ພວກເພິ່ນຕີກັນໄລຍະໜຶ່ງຢູ່ໃນເຂດຕາແສງທ່າສະມູໄຊ, ແຕ່ວ່າມື້ຕີກັນນີ້ ປ້າມະນີວັນພັດຢູ່ໃນບ້ານສະມູໄຊ, ອ້າຍນ້ອງທະຫານຝ່າຍພວກເຮົາອອກເຮືອນ ແລະ ຝ່າຍພວກເຮົາເຮັດຈົນສຳເລັດ, ກາງຄືນທະຫານຍາມ, ປ້າມະນີວັນເອງກໍ່ຍາມບໍ່ໄດ້ນອນບໍ່ໄດ້ຫຼັບ, ອັນໜຶ່ງເພິ່ນຮັກສາເງິນຍ້ານມັນເສຍ. ໄລຍະນັ້ນແມ່ນວ່າຫຍຸ້ງຍາກຄືແນວນັ້ນ. ບາດວິດທັ້ນແລ້ວໄລຍະເພິ່ນລົງພື້ນຖານໄລຍະທີສາມ ແມ່ນເພິ່ນລົງພື້ນຖານຢູ່ຕາແສງນາກະລາ ແລະ ບ່ອນນັ້ນແລ້ວກັນດານແທ້, ປະຕິການຕາແສງນາກະລານີ້ຫຍຸ້ງຍາກຫຼາຍ ຍ້ອນນັ້ນແລ້ວເພິ່ນລົງພື້ນຖານຊຸດທີສາມ ປີ 1987. ຄັນເວົ້າລັບຫຼັງແລ້ວແມ່ນປ້າມະນີວັນລົງຕາແສງນາກະລາ, ເພິ່ນລົງມື້ນັ້ນປະຕິການກໍ່ອ້ອມບ້ານມື້ນັ້ນ. ປ້າມະນີວັນວ່າຊິນອນແຕ່ວ່າປະຕິການ, ພໍດີມືດຊຸມລຸ້ມປະຕິການອ້ອມບ້ານນາກະລາ ເພິ່ນກໍ່ລວມຕາແສງລວມກອງຫຼອນ. ເວົ້າລວມແລ້ວປະຊາຊົນເຂດນັ້ນຄືມື້ນີ້ແລ້ວມື້ອື່ນມັນມາອີກ, ມັນມາຈັບເອົານາຍບ້ານ, ນັກຮຽນ ແລະກໍ່ຈັບເອົາຫົວໜ້າກອງຫຼອນ ຈັບເອົາເຂົາແລະຂ້າຖິ້ມ, ເຂົາໄປຜູກຢູ່ກົກໄມ້ແລ້ວກໍ່ຂ້າຖິ້ມ, ຂ້າ 4 ໂມງແລງ, ມາຮອດ 7 ໂມງກາງຄືນ ແມ່ນເຂົາໄປອ້ອມບ້ານນາກະລາ, ແຕ່ເພິ່ນເມົາແຕ່ປຶກສາຫາລືຢູ່ເຮືອນພໍ່ຮັກ, ຈົນເພິ່ນເຮັດພໍ່ຮັກເທົ່າດຽວນີ້. ພໍ່ຮັກຂອງເພິ່ນຢູ່ບ້ານນາກະລາ, ເພິ່ນປຶກສາຫາລືກັບກອງຫຼອນວ່າພວກເພິ່ນຊິໄປນອນຢູ່ໃສ?, ປ້າມະນີວັນເວົ້າວ່າ: ຄັນເຮົານອນໃນບ້ານນີ້ເດັດຂາດບໍ່ໄດ້, ຈັກໜ່ອຍປະຕິການນີ້ມາ. ພໍດີເວົ້າບໍ່ທັນສຸດ, ຈິວນ້ອຍພັດມາບອກ, ຈິວນ້ອຍໃນບ້ານນາກະລາມາບອກວ່າ: ແມ່ອອກພໍ່ອອກເອີຍ! ປະຕິການມາເຕັມບ້ານແລ້ວໃດ! ເຕັມວັດ! ພໍດີເຂົາກໍ່ອອກໄປໂລດ, ແລ້ວຈຸກອງຫຼອນ, ຈຸຕາແສງ, ຈຸປ້າມະນີວັນນີ້ພັດຍັງໄປເອົາບາໂລຢູ່ໃນສ້ວມ ໃນບ່ອນນອນເຮືອນພັກກັບປືນ. ບ້ານນັ້ນມັນກັນດານ. ພໍດີປ້າມະນີວັນເອົາປືນກັບບາໂລໃສ່ຫຼັງແລ້ວເພິ່ນກໍ່ລົງຂັ້ນໄດ, ເພິ່ນລົງແລ້ວກໍ່ເຂົ້າຕາລ່າງເຮືອນ, ພໍດີແມ່ເພິ່ນແລ້ວຂຶ້ນຕາມຫຼັງ, ຂອງຫວິດເພິ່ນລົງມາແລ້ວແມ່ເພິ່ນຂຶ້ນ. ປະຕິການຂຶ້ນຕາມຫຼັງແມ່ຮັກ ປ້າມະນີວັນ ແລະ ຖາມວ່າໃຜນີ້? ແມ່ຮັກຂອງເພິ່ນເວົ້າວ່າ:

ຂ້ອຍນີ້! ໃນໃສມະນີວັນ? ມະນີວັນເມືອແລ້ວເດ! ບໍ່ຍັງ! ມື້ກີ້ນີ້ເຂົາເລີກການ! ມື້ກີ້ນີ້ເຂົາຫາກໍ່ເລີກການ! ບໍ່, ບໍ່ທັນເມືອ! ເລີກລວມແລ້ວເຂົາເມືອໂລດ, ດຽວນີ້ຄືຊິຮອດປາກຊອງແລ້ວ, ບ່ອນກອງພັນທີ 5 ຢູ່, ຢູ່ບ່ອນກອງທັບເຂົາຢູ່. ບໍ່ເຂົາວ່າຢູ່ນີ້ໂລດ, ມື້ກີ້ນີ້ຍັງຢູ່ແຕ່ລາວເມືອແລ້ວ, ລາວວ່າເມືອແລ້ວ. ປ້າມະນີວັນນີ້ກໍຈິບເຫັນເຂົາໄລ່ຖາມແມ່. ປ້າມະນີວັນນີ້ກໍ່ຢູ່ໃນສວນຫັ້ນ. ພໍດີອີ່ຕາປະຕິການລິງແຕ່ເຮືອນ ແລະກໍ່ຖຽງກັບແມ່ເພິ່ນ, ແລະມັນເຫັນນ້ອງຂອງອ້າຍມະຫາທີ, ມັນຈັບເອົານ້ອງມະຫາທີ, ແລ້ວຖາມວ່າມະນີວັນໄປໃສ? ເມືອແລ້ວ! ລາວວ່າ, ເຂົາເມືອໝົດແລ້ວ. ບໍ່ມະກີ້ນີ້ຍັງຢູ່! ບໍ່ເຂົາເມືອແລ້ວ! ເອົ່າເຈົ້າເວົ້າວ່າຂຶ້ນເບິ່ງໃນເຮືອນນີ້! ແລ້ວເຂົາກໍ່ຕີນ້ອງອ້າຍມະຫາທີ, ແລ້ວເຂົາກໍ່ຕີລຸງໂພສານ ຢູ່ໃນຕາແສງຫັ້ນ 3 ບາດ. ອັນນັ້ນແລ້ວແມ່ນວ່າກັນດານທີ່ສຸດ. ຊູ່ກັນເອົາຊື່ໆ. ປະກົດວ່າພວກປ້າມະນີວັນຫາກໍ່ໄດ້ສອງຄືນ, ພໍດີເຂົາແຕກໂລດພວກນັ້ນພວກທີ່ເປັນສັດຕູເກົ່າຫັ້ນ, ຝ່າຍພວກເຮົາຍຶດພວກເຂົາແຕກເມືອບ້ານຈຸນັ້ນ, ແລ້ວພວກປ້າມະນີວັນກໍ່ນອນສອງຄອນ ແລ້ວເຂົາກໍ່ແຕກໝົດພວກນັ້ນ 200 ປາຍຄົນ. ແລ້ວປ້າມະນີວັນຢູ່ໃນບ້ານທົ່ງຕາແສງນາກະລາແລ້ວບາດນີ້, ແຕ່ວ່າເພິ່ນບໍ່ໄດ້ນອນເຮືອນເລີຍ, ມີແຕ່ນອນຢູ່ປ່າຢູ່ດົງ. ເພິ່ນໄປໃນໃສກໍ່ແມ່ນສັດຕູ, ໄປໃນໃສກໍ່ແມ່ນປະຕິການລັດຫັ້ນລັດໜີ້. ບໍ່ແມ່ນວ່າພວກເຮົາອວດອິ່ງທະນົງຕົວ, ເວລານັ້ນພວກເພິ່ນ 6 ຄົນ ແລ້ວ ແລະ ຜູ້ຍິງຫັ້ນ 3 ຄົນ; ຂອງປ້າມະນີວັນນີ້ແມ່ນຫົວໜ້າລິງພື້ນຖານເຂດຕາແສງນາກະລາ. ຕື່ນມື້ເຊົ້າມາທະຫານສົມທົບມາເຕົ້າໂຮມປະຊາຊົນແລ້ວທັງ ຜູ້ຍິງຜູ້ຊາຍຜູ້ເຖົ້າຜູ້ແກ່. ກອງຫຼອນເວົ້າວ່າ: ເຮົາເຮັດວຽກແຕ່ເຮົາບໍ່ປົກປັກຮັກສາບ້ານເຮົາຕາແສງເຮົາຊິເປັນຄືແນວນີ້. ເຂົາຂ້າສອງຄົນຜູກໄວ້ໃນກົກໄມ້. ແລ້ວປ້າມະນີວັນ ຖາມປະຊາຊົນວ່າ: ຜູ້ໃດຢາກຈັບອາວຸດດຽວນີ້ ປະຊາຊົນຕອບເພິ່ນວ່າ: ຜູ້ນັ້ນກໍ່ຢາກຖື ຜູ້ນີ້ກໍ່ຢາກຖື ພໍດີປ້ານີວັນກໍ່ເອົາປືນປະກອບໃຫ້ກໍ່ສົມທົບກັບກອງຫຼອນຕາແສງ ແລະ ຈັດຕັ້ງຢູ່ນາກະລາເລີຍ, ຕັ້ງຄ້າຍກອງຫຼອນຢູ່ນາກະລາ, ທັງຕາແສງທັງກອງຫຼອນທັງທະຫານກອງພັນທີ 5 ທັງພວກປ້າມະນີວັນນີ້ 6 ຄົນ ຈຶ່ງວ່າໄດ້ເປັນຄ້າຍກອງ

ຫຼອນຢູ່ນາກະລາເຖິງປະຈຸບັນນີ້. ປີ 1978 ຈັດຕັ້ງກອງຫຼອນນາກະລາ. ເພິ່ນປຸ່ງນເງິນກ່ອນ, ປຸ່ງນເງິນປິດປ່ອຍກັບເງິນວຽງຈັນ, ໃນປີ 1978 ແລະ ຄັ້ງທີ 2 ແມ່ນ 1979 ຫາກວ່າເພິ່ນເວົ້າລຶບຫຼັງ ເພິ່ນເວົ້າວ່າ: ມັນເປັນຄືແນວນັ້ນ ລະອິດລະອຽວ ແຕ່ຜົນງານມັນຊິໄດ້ບໍ່ຊ່າງວ່າ ເພິ່ນເວົ້າອີກ: ເອີແຕ່ເພິ່ນນີ້ ໄລຍະ ປີ 1979 ໄດ້ປະດັບນາມມະຍົດ ເປັນວິລະຊົນແຫ່ງຊາດ.

ປ້າມະນີວັນໄດ້ປະດັບນາມມມະຍົດວິລະຊົນ, ແຕ່ວ່າການຕີນີ້ເພິ່ນບໍ່ໄດ້ຕີສັດຕູ, ແຕ່ວ່າເວລາເພິ່ນໄປນຳທະຫານພົບສັດຕູເພິ່ນກໍ່ໄດ້ຕີຄືກັນຍິງຄືກັນປືນທີ່ເພິ່ນຖືແມ່ນກາກະບິນ, ເພິ່ນຖືແຕ່ປີ 1971 ຢູ່ທະຫານ. ເພິ່ນຕີສັດຕູຢູ່ຊາຍແດນລາວໄທ ທີ່ເມືອງສອງຄອນ ປີ 1979. ທະຫານລາວ - ທະຫານຫວຽດນາມ ເຂົາເຈົ້າໄປນຳກັນແຕ່ວ່າເວລານັ້ນລົງ 3 ຕາແສງຄືຕາແສງນາພວກ, ຕາແສງທ່າສະມູໄຊ, ຕາແສງໜອງບົວທ່າ ຫາກປ້າມະນີວັນເປັນຫົວໜ້າພາເຂົາໄປທັງນັກຮຽນ, ໄປປ້ອງກັນແມ່ນທະຫານຫວຽດນາມ ທະຫານລາວ, ເວລານັ້ນ ເພິ່ນໄປປຸ່ງນເງິນ, ເຂົາຢູ່ນອກຕີກັນ, ຂອງເຂົາປຸກເຮືອນເດ. ປ້າມະນີວັນຢູ່ທາງບ້ານປຸ່ງນເງິນ ເວລານັ້ນກໍ່ມີສຽງປືນແຕກທາງທ່າສະມູໄຊ, ຫາກເພິ່ນນີ້ໄປທັງ 3 ຄົນ ໃນຄະນະຫົວໜ້າແມ່ນປ້າມະນີວັນ ຮອງແມ່ນນາຍຊຽງ ເຖິງທະຫານກອງພັນທີ 5, ເຂົາເປັນຜູ້ຕີ ປ້າມະນີວັນເປັນຜູ້ປຸ່ງນເງິນ ເພິ່ນເປັນຫົວໜ້າສາມຕາແສງ ເຕັ້ນເໜືອເຕັ້ນໃຕ້ຢູ່ເພາະຢ້ານບໍ່ສຳເລັດ, ຂອງມື້ນັ້ນທາງເພິ່ນປຸ່ງນເງິນທັງເຂົາຕີກັນ, ເຂົາຕີກັນຕອນແລງເວລາ 4 ໂມງ ພວກປ້າມະນີວັນເຮັດວຽກທາງນີ້ກໍ່ຍັງບໍ່ທັນໄດ້ສຳເລັດປຸ່ງນເງິນ, ມັນເປັນຄືແນວນັ້ນ.

ພວກທີ່ໄປນຳອັນນີ້ແມ່ນນາງວຽງ, ຫາກລາວຕາຍແລ້ວ, ເຜົ່າລາວ, ຢູ່ບ້ານໜອງບົວທ່າ, ແລະ ທ້າວພອນ, ນາງພອງ, ຢູ່ບ້ານໜອງບົວທ່າຄືກັນ.

ປ້າມະນີວັນນີ້ ແບບວ່າໄປນຳກອງບັນຊາການທະຫານສູງສຸດກອງພັນທີ 14 ພວກເຂົາເປັນຜູ້ຕີທາງໜ້າ, ພວກປ້າມະນີວັນເປັນຜູ້ຕີທາງຫຼັງມັນເປັນແນວນັ້ນເວົ້າແຈ້ງ. ພວກປ້າມະນີວັນເຂົ້າຢູ່ນຳຢູ່ດົງນອນນອກບ້ານ. ເພິ່ນນອນ

ນຳປະຊາຊົນໃນບ້ານ, ຢູ່ກໍ່ສ້າງຮາກຖານປຸກລະດົມປະຊາຊົນເລີຍ, ແຕ່ລະເທື່ອເພິ່ນຢູ່ຂຶ້ນຂວາຍເພິ່ນກໍ່ເຮັດແນວນັ້ນ. ບາດເພິ່ນຢູ່ເປັນຄະນະຊາວໜຸ່ມເພິ່ນກໍ່ເຮັດວຽກອັນເກົ່າ, ບາດເພິ່ນຢູ່ເພດຍິງກໍ່ເຮັດວຽກອັນເກົ່ານີ້ຈົນເພິ່ນໄດ້ອອກຊື່ງ ພັກຜ່ອນຈຶ່ງໄດ້ປະວຽກຂຶ້ນຂວາຍ. ເພິ່ນໄດ້ຂຶ້ນຂວາຍລະດົມສືບສະພາບໃນບ້ານອີກ, ສືບປະຊາຊົນຢູ່ໃນບ້ານຜູ້ໃດເປັນນັກສືບແນວໃດ ເຮັດຕະຫຼອດເລີຍຈົນເພິ່ນນີ້ອອກປີ 1996.

ໃນໄລຍະປີ 1975 ພວກເຂົາເຄື່ອນໄຫວຮ້າຍແຮງທີ່ສຸດ ເວລານັ້ນແມ່ນຢູ່ເມືອງສອງຄອນ ຕໍ່ໃສ່ເມືອງຈຳພອນ. ສັດຕູຍິງ ທ່ານບຸນຍັງ ວໍລະຈິດ ທາງພຸ້ນທາງທ່າປາງທອງ, ເມືອງທ່າປາງທອງ ມັນຂຶ້ນກັບເມືອງສອງຄອນ. ເວລານັ້ນ ທ່ານບຸນຍັງເຮັດວຽກຢູ່ສອງຄອນ, ປ້າມະນີວັນນີ້ກໍ່ໄປຮອດບ່ອນລຸງບຸນຍັງຖືກເຈັບ, ເພິ່ນໄປຮອດບ້ານນັ້ນກາຍບ້ານນັ້ນອີກ, ກາຍບ່ອນເຂົາຕີກັນຫັ້ນອີກ. ເວລານັ້ນຢູ່ເຂດບຣູ, ລາວມີແຕ່ 3 ບ້ານ 4 ບ້ານ. ລາວລຸ່ມມັນປົນກັບບ້ານລາວເທິງບ້ານບຣູ. ຕາແສງຫ້ວຍມື່ນ, ບ່ອນລຸງບຸນຍັງຖືກເຈັບແມ່ນເຂດບ້ານບຣູ, ວຸ່ນວາຍທີ່ສຸດເວລານັ້ນຖືກເຂົາຕີລຸງບຸນຍັງ ລະຫວ່າງປີ 1988 ຫຼືວ່າ ປີ 1987 ນີ້.

ປ້າມະນີວັນໄດ້ໄປຮຽນວຽກແມ່ຍິງ, ວຽກສະຫະພັນແມ່ຍິງ, ຢູ່ເກົ່າໃຍ້, ໃກ້ກັບຮ່າໂນ້ຍ[80]. ແຕ່ລະບ້ານລະດົມເດັກນ້ອຍໄປຮຽນຢູ່ຫວຽດນາມກໍ່ແມ່ນຈຸທີ່ 13 ຈຸປ້າມະນີວັນນີ້ໄປລະດົມເອົາ, ໄດ້ແລ້ວເພິ່ນກໍ່ໄປສົ່ງໃຫ້ຈຸທີ່ 13.

ເພິ່ນກໍ່ລະດົມໄດ້ປະມານ 50 ປາຍຄົນນີ້ແລ້ວ ເພິ່ນວ່າວຸ້ນວາຍໃນເວລານັ້ນເດີ ເຊບັ້ງໜຽງ, ເຊນວນ, ຫ້ວຍມື່ນ. ມີພວກປະຕິການເຄື່ອນໄຫວຫຼາຍເພິ່ນວ່າເຫດຜົນ: ກຳລັງມັນຄ້າງແດ່, ກຳລັງມັນຫລົບລີ້ຢູ່ໃນເຮືອນຄືເພິ່ນເວົ້າຫັ້ນແລ້ວ, ຄືຕາແສງນາກະລາບ່ອນເພິ່ນໄປຢູ່ຫັ້ນ, ຄືເພິ່ນມານອນຄືມື້ນີ້ມື້ອື່ນ ມື້ຮືສັດຕູມັນອອກໝົດ. ສັດຕູທີ່ປົບ, ພວກເຮົາຢຶດອຳນາດແດ່ ແລະກໍ່

[80] ເກົ່າໃຍ້ ແມ່ນຊື່ໜຶ່ງຂອງໂຮງຮຽນບ່ອນທີ່ປ້າມະນີວັນໄປຮຽນຢູ່ໃກ້ກັບນະຄອນຫຼວງຮ່າໂນ້ຍ. ປະເທດຫວຽດນາມຊຶ່ງຮ່າງຈາກເມືອງຮ່າໂນ້ຍໄປທາງທິດຕາເວັນຕົກ ປະມານ 5 ຫຼັກ.

ພວກທີ່ເປັນໄມ້ເປັນມືຂອງມັນແດ ແລະກໍ່ເປັນນັກສືບ, ແລະ ກໍ່ແມ່ນພວກທີ່ໂຕນອອກຢູ່ປ່າຢູ່ດົງເລີຍ, ແນວນັ້ນລະ ບ້ານລະ 100 ຄົນ ບ້ານລະ 200 ຄົນ. ເຂົາອອກເຮືອນຄືນີ້ນັ້ນ ແລະ ກາງຄືນເຂົາເຂົ້າບ້ານ, ກາງເວັນເຂົາອອກຢູ່ປ່າ, ເຂົາຖືເຄື່ອງທຳມະດາຄືຄົນເຮົານີ້, ຄືຢູ່ກະໂຕບ້ານລະຫານ້ຳ ບ່ອນຄ້າຍຝ່າຍພວກເຮົາຢູ່ນີ້, ມີຄົນທີ່ເຄີຍເຮັດວຽກນຳກັນເຮັດວຽກຊາວໜຸ່ມເຮັດວຽກແມ່ຍິງ, ເຮັດວຽກປົກຄອງເຮັດວຽກກອງຫຼອນ, ແລ້ວເຂົາໂຕນອອກ, ໂຕນແລ້ວຢາກມາຂໍເຂົ້າ ຢາກເຮັດຝ່າຍພວກເຮົາຄືນ. ປ້າມະນີວັນ ແລະເຂົາບໍ່ໄດ້ພົບ, ຄັນເຂົາພົບກໍ່ແມ່ນອາດຈະຕາຍເລີຍ, ຂອງຄົນວ່າແມ່ນຄົນເຮັດວຽກນຳກັນເດ, ປ້າມະນີວັນກໍ່ຈື່ໜ້າເຂົາ, ເຂົາກໍ່ຈື່ໜ້າປ້າມະນີວັນ.

ປ້າມະນີວັນວ່າ: ຂອງວ່າທະຫານຝຣັ່ງມາປຸ່ງນເປັນທະຫານອາເມລິກາແຕ່ກົງຈັກຄືກັນ. ຜູ້ເມືອຢູ່ເຮືອນກໍ່ມີ ບາດນີ້ປະຕິການເປັນຫົວໜ້າແຕ່ກ່ອນພັດໂຕນອອກໄປຢູ່ປ່າຢູ່ດົງ, ແມ່ນຈຸນັ້ນຂົນຂວາຍເອົາຊາວໜຸ່ມທັງແມ່ຍິງທັງຜູ້ຊາຍ, ຢູ່ລະຫານ້ຳສອງຄອນຫັ້ນ. ເກີດກ່ອນໝູ່ໝົດຢູ່ແຂວງສະຫວັນນະເຂດກໍ່ແມ່ນເກີດຢູ່ເມືອງສອງຄອນຫັ້ນ, ຕີກັນນີ້ພວກເພິ່ນປຸ່ງນເງິນຫັ້ນໂລດ, ເຂົາລັດຂ້າ ເຂົາລັດທະຫານຝ່າຍເຮົາແບບຕີເອົາຍິງເອົາ, ເອົາປືນເອົາໝາກແຕກຍິງໃສ່.

ໄລຍະປີ 1976 ປຸ່ງນເງິນວຽງຈັນ ປີນັ້ນແລະເກີດກ່ອນໝູ່, ເຂົາຂ້າຄູບາອາຈານ. ສ່ວນບ້ານປ້າມະນີວັນຢູ່ໝີ້ ອ້າຍທອງເວີນກໍ່ຖືກຂ້າ ປີ 1976 ນັ້ນ ຢູ່ຫັ້ນແລ້ວຢູ່ເມືອງສອງຄອນ, ບ່ອນປ້າມະນີວັນຢູ່ຫັ້ນແລ້ວ.

ປີ 1982 ເວລານັ້ນກໍ່ກຳລັງອຸ່ນແລ້ວ ທະຫານພວກເຮົາຕີກັບທະຫານສັດຕູ, ພະນັກງານທະຫານຂອງພວກເຮົາກໍ່ຕີກັບສັດຕູບໍ່ແມ່ນງ່າຍ, ເວລາເຂົາຕີກັບສັດຕູ ປີ 1978 ຫັ້ນ ແມ່ນວ່າປ້າມະນີວັນໄປຮຽນໜັງສືຢູ່ປາກເຊ, ສັດຕູຕີຜູ້ຮອງສະຫະພັນແມ່ຍິງ, ແລະຮອງຫັ້ນຢູ່ຄ້າຍນີ້. ພໍດີປ້າມະນີວັນໄປໂຮງຮຽນໜັງສືໄດ້ 3 ເດືອນກໍ່ພໍດີເຂົາຕີໂລດ. ຮອງປ້າມະນີວັນພັດຊື່ມະນີວັນຄືກັນ, ຜູ້ນັ້ນອີກພັດນີວອນ. ເຂົາຕີໂລດ, ເວົ້າຂໍໂທດວ່າຫົວແຕກໝົດ.

ທຳອິດແມ່ນປ້າມະນີວັນຮຽນໜັງສື, ພໍດີ 2 ປີແລ້ວເພິ່ນນີ້ໄປຮັບຜິດຊອບຢູ່ເມືອງພິນ. ເພິ່ນຍ້າຍໄປຢູ່ເມືອງພິນເຮັດວຽກຄືເກົ່າ, ເຮັດວຽກຊາວໜຸ່ມເພດຍິງ, ເພິ່ນອອກມື້ນັ້ນກໍ່ເຂົ້າມື້ນັ້ນເລີຍຈົນໄດ້ກິນເບ້ຍບຳນານແມ່ນເຮັດວຽກຢູ່ນີ້ເມືອງພິນນີ້.

ປີ 1987 ປ້າມະນີວັນຍ້າຍມາຢູ່. ປີ 1996 ແມ່ນເພິ່ນອອກກິນເບ້ຍບຳນານ. ປີ 1998 ເພິ່ນມາຢູ່ນີ້, ຢູ່ເຮືອນປະຈຸບັນ. ຢູ່ບ້ານປ້າມະນີວັນນີ້ຫຼາຍຄົນອອກເຮັດການປະຕິວັດໝົດເລີຍ.

ສ່ວນຫຼາຍແມ່ນເປັນທະຫານ, ຜູ້ເປັນທະຫານເກົ່າໄດ້ຢູ່ 50 ກວ່າຄົນໃນບ້ານເພິ່ນ. ທະຫານອິດສະຫຼະພາຍຫຼັງຍຶດອຳນາດ ແລ້ວເຂົາເຈົ້າມາຢູ່ບ້ານເກີດ.

ປ້າມະນີວັນ ເຄີຍພົບແຕ່ກ່ອນແມ່ນທະຫານຫວຽດນາມແດ່, ທາກຕົ້ນຕໍແມ່ນລາວພວກເຮົາພະນັກງານທະຫານລາວຄົນທາງຕະໂອ່ຍພຸ້ນ, ສາລະວັນ, ແລະ ທາງອັດຕະປື ເຂົາມາເປັນປະຈຳ, ເປັນພະນັກງານທາງເຮົານີ້, ຂອງວ່າເຂົາເຕົ້າໂຮມຢູ່ແຂວງ, ຢູ່ທາງແຖບເມືອງພິນ, ຂົງເຂດບ້ານປ້າມະນີວັນນີ້, ຢູ່ໃນຂົງເຂດນັ້ນ ມັນມີດົງກະເພາະ, ພວກເຂົາມາແຕ່ອັດຕະປື, ສາລະວັນ ຈຳປາສັກ ແລະ ຈອດຢູ່ນີ້ເຂົາຈະໄປຊຳເໜືອ, ຂອງເຂົາຍ່າງໄປເດ, ບໍ່ແມ່ນໄປນຳລົດເວລານັ້ນ. ນ້າບ່າວເພິ່ນຊື່ວ່າໜູຮັກ, ຄຳມີບໍ່ແມ່ນໜູຮັກເຮົານີ້! ເຂົາເຈົ້າເຂົ້າການປະຕິວັດ ແຕ່ສະໄໝຝຣັ່ງ, ແຕ່ປີ 1954-1955 ນ້າບ່າວເພິ່ນເຂົ້າການປະຕິວັດກ່ອນພັ້ນອີກ, ຂອງວ່ານ້າບ່າວເພິ່ນນີ້, ນ້າບ່າວນີ້ລາວເປັນອີສັງເຂົາວ່າໄປເຕົ້າໂຮມ 2 ແຂວງ ແລະ ກັບມາຂົນຂວາຍເອົາພະນັກງານ. ແລະຂົນຂວາຍປຸກລະດົມປະຊາຊົນ ອັນນັ້ນນ້າບ່າວຄຳມີ. ຜູ້ອ້າຍພັ້ນແລ້ວຊື່ວ່າໜູຮັກພັດທັງເປັນພໍ່ບ້ານສັດຕູ, ຂອງເປັນທັງສອງກ້ຳສອງຝ່າຍ ສັດຕູມາແລ້ວລາວມາບ້ານ, ມື້ໃດບໍ່ມີສັດຕູແມ່ນລາວເຄື່ອນໄຫວຢູ່ປ່າ, ຂອງລາວມາເພື່ອຢາກແກ້ເດ. ລາວຢ້ານເຂົາຕົບຕີທໍລະມານປະຊາຊົນ, ຢ້ານເຂົາຖາມວ່າພໍ່ບ້ານໄປໃສ, ແລະມາກໍ່ມາຊົ່ວຄາວແລ້ວ, ອອກຢູ່ປ່າຢູ່ດົງນຳທະຫານຝ່າຍເຮົາ.

ປ້າມະນີວັນ ບາງເທື່ອກໍ່ຮູ້ຂອງແນວວ່າມັນເປັນແບບຊີ້ພາ: ຄັນວ່າສັດຕູມາບ້ານແມ່ນເດັກນ້ອຍກໍ່ບໍ່ມີ, ໃນບ້ານນີ້ເດັກນ້ອຍກໍ່ບໍ່ຢູ່, ບໍ່ມີໃຜວຸ່ນວາຍ. ແຕ່ຄັນເວົ້າວ່າອິດສະຫຼະແລ້ວມານີ້ແມ່ນປະຊາຊົນໃນບ້ານອູບໂລດ, ທະຫານພາເຮັດ. ແຕ່ສັດຕູມາ (ແຕ່ກ່ອນເຂົາເອີ້ນສັດຕູ), ສັດຕູມາແມ່ນບໍ່ເຫັນໃຜເລີຍຢູ່ໃນບ້ານ, ປະຊາຊົນເຂົ້າປ່າໝົດຫຼືເຂົາເຈົ້າບໍ່ກ້າລົງເຮືອນ. ເດັກນ້ອຍກໍ່ບໍ່ກ້າລົງເຮືອນ, ແຕ່ວ່າອ້າຍນ້ອງທະຫານອ້າຍນ້ອງພະນັກງານຝ່າຍເຮົາມາແມ່ນເບິ່ງໂລດແລ້ວເຂົາເຈົ້າມາເບິ່ງເຂົາຟ້ອນເຂົາລຳ ບໍ່ວ່າຍິງບໍ່ວ່າຊາຍ, ບໍ່ວ່າເດັກນ້ອຍເທົ່ານັ້ນ. ແນວນັ້ນຢູ່ໃນບ້ານປ້າມະນີວັນແຕ່ກ່ອນ. ພາຍຫຼັງພວກເຮົາຍຶດອຳນາດເຂົາເຈົ້າເມືອຢູ່ບ້ານ 50 ກວ່າຄົນ, ເກືອບວ່າຢາກຄູຫຼັງຄາເຮືອນ, ເຮືອນລະ 2 ຄົນ ເຮືອນລະ 3 ຄົນ ກໍ່ມີ. ບ້ານປະຕິວັດບ້ານອິດສະຫຼະເຂົາເອີ້ນ, ເຂົາບໍ່ໄດ້ເອີ້ນບ້ານຂອນແກ່ນ, ເຂົາເອີ້ນບ້ານອິດສະຫຼະ.

ບ້ານປ້າມະນີວັນແມ່ນບ້ານວິລະຊົນ ແຕ່ວ່າຫາກໄດ້ຄືກັນ, ໃບອີ່ສັ່ງເພິ່ນເວົ້າວ່າ ໂຕເດັ່ນຂອງບ້ານ, ຂອງແນວວ່າສູນກາງແລ້ວເອົາໃຫ້. ບ້ານໂຕເດັ່ນ ມີແຕ່ບໍ່ໄດ້ເປັນບ້ານວິລະຊົນ, ເປັນບ້ານແບບຢ່າງ.

ລັດຖະບານໃຫ້ປ້າມະນີວັນແມ່ນນີ້ແລ້ວເຮືອນນີ້ແລ້ວ, ລັດເຮັດເຮືອນໃຫ້ເພິ່ນ. ແຕ່ເກົ່າເພິ່ນຢູ່ເມືອງພິນ, ລັດມອບໃຫ້ເຮືອນຫັ້ນ 2 ຊັ້ນ, ຫວິດຫັ້ນເຮືອນຫັ້ນແມ່ນເຮືອນຫັ້ນແມ່ນເຮືອນເພດຍິງ, ເປັນຫ້ອງການເພດຍິງ, ພາຍຫຼັງທີ່ວ່າປ້າມະນີວັນອອກກິນເບ້ຍບຳນານແລ້ວ, ເຮືອນໂຕນັ້ນເຂົາມອບໃຫ້ເພິ່ນ. ແຕ່ເກົ່າເປັນຫ້ອງການຢູ່ລຸ່ມເພິ່ນຢູ່ເທິງ. ພາຍຫຼັງທີ່ວ່າເພິ່ນອອກເບ້ຍບຳນານລັດກໍ່ມອບໃຫ້ເພິ່ນເລີຍ, ແລ້ວເຂົາກໍ່ເຮັດເຮືອນຢູ່ພີ້, ເຮັດເຮືອນຢູ່ພີ້ແລ້ວ, ປີ 1998 ແລະ ປ້າມະນີວັນມາຢູ່ພີ້. ແມ່ນເຮືອນໂຕດຽວນີ້ແລ້ວເພິ່ນຈຶ່ງຍ້າຍມາຢູ່. ເຂົາມອບໃຫ້ເພິ່ນເປັນກຳມະສິດເລີຍ. ທີ່ດິນແຕ່ເກົ່າລະແມ່ນວ່າ 40x39 ແມັດ.

ດຽວນີ້ປ້າມະນີວັນເອງຮູ້ສຶກດີມີກດີໃຈຫຼາຍຕໍ່ຂັ້ນເທິງຕໍ່ພັກຕໍ່ລັດ ທີ່ໄດ້ຕອບສະໜອງແມ່ນເຮືອນຫຼັງໜຶ່ງ, ດິນຕອນໜຶ່ງ, ເຄື່ອງຂອງປະກອບໃນເຮືອນ

ໂຕະຕັ່ງແມ່ນຂອງລັດໝົດທີ່ມອບໃຫ້ກັບເຮືອນ ເພິ່ນກໍ່ດີມີກຳດີໃຈທີ່ວ່າຂັ້ນເທິງມອບໝາຍໃຫ້ ຖືວ່າຊີວິດຂອງເພິ່ນສຸດທີ່ດີມີກຳດີໃຈທີ່ວ່າຂັ້ນເທິງໄດ້ເບິ່ງແຍງເພິ່ນສຸດຂີດອັນນັ້ນບັນຫາໜຶ່ງ. ບັນຫາທີສອງແມ່ນວ່ານີ້ແມ່ນຍ້ອນຂອງບຸນແມ່ເພິ່ນ, ຂອງປ້າເພິ່ນ, ຂອງລຸງເພິ່ນ. ບັນຫາທີສາມນີ້ປ້າມະນີວັນ ເອງສຸດທີ່ສຸດທີ່ດີມີກຳດີໃຈທີ່ເຫັນວ່າຂັ້ນເທິງບໍ່ປະຖິ້ມເພິ່ນເບິ່ງແຍງເພິ່ນສຸດຂີດ, ບໍ່ໄດ້ປະມາດຂັ້ນເທິງ, ຂັ້ນເທິງເບິ່ງແຍງເພິ່ນຄືປະຈຸບັນນັບແຕ່ການກິນການຢູ່, ບ່ອນນອນ, ແລະລົດນີ້ຂັ້ນເທິງກໍ່ເອົາໃຫ້ວ່າເພິ່ນນີ້ບໍ່ມີເງິນຊື້. ແນວນັ້ນເພິ່ນວ່າຂັ້ນເທິງຕອບສະໜອງໝົດ, ເພິ່ນໄດ້ຂາຍໂກຕ້າລົດ ເພາະວ່າບໍ່ມີເງິນຊື້ລົດ. ຂັ້ນເທິງໃຫ້ເພິ່ນລົດກະບະຄັນໜຶ່ງ, ແຕ່ບໍ່ມີເງິນເອົາ, ແນວນັ້ນເພິ່ນຂາຍໄດ້ 20 ລ້ານກີບ. ອັນນັ້ນແລ້ວເພິ່ນວ່າຄວາມຮູ້ສຶກດີໃຈ, ຂອງວ່າເພິ່ນນີ້ໝົດເທົ່ານັ້ນ. ອັນນັ້ນເງິນບຳນານຂອງເພິ່ນໄດ້ແຕ່ 224,000 ກີບຕໍ່ເດືອນ.

ລຸງສີທັນ ໂຄດສຸວັນ

ເຜົ່າຜູ້ໄທ

(ເມືອງ ວິລະບູລີ ແຂວງສະຫວັນນະເຂດ)

ອາຍຸລຸງສີທັນປີນີ້ 70 ປີ, ລາວນີ້ເກີດຢູ່ບ້ານນ້ຳປະເຄນ, ເກີດຈາກຄອບຄົວກຳມາຊີບ, ທຸກຍາກອະນາຖາ, ພໍ່ແມ່ລາວບໍ່ແມ່ນວ່າຊີຮັ່ງມີເປັນດີອີ່ສັງ. ແຕ່ວ່າສະພາບຂອງພໍ່ແມ່ລາວກ່ອນຫັ້ນລາວກໍ່ບໍ່ທັນຮູ້ຄືກັນ, ລາວຮູ້ແຕ່ວ່າຫັ້ນເປັນແມ່ກະໝ້າຍ, ແມ່ນເອົາພໍ່ກ່ອນກໍ່ຕາຍ, ຈຶ່ງວ່າມາເອົາກັບລຸງສີທັນນີ້ທຸກຍາກ, ເພາະວ່າຢູ່ໃນເຮືອນປູ່ຂອງເພິ່ນຫັ້ນມີສາມຄົນ, ສີ່ທັງຍ່າລາວຫັ້ນ, ເພາະວ່າຍ່າຂອງລາວເອົາປູ່ລາວຢູ່ອ່າງຄຳ ແລະຍ້າຍມາຢູ່ນ້ຳປະເຄນ ປະຈຸບັນນີ້[81], ຍ້ອນເສິກກິດຂີ່ຂູດຮີດຂອງເຈົ້າກ່ຳຫັ້ນໃດ, ຈຶ່ງໄດ້ຍ້າຍມາ, ປົບເພາະວ່າເຈົ້າກ່ຳຢາກຂ້າປູ່ລາວ. ເລື່ອງມັນຫັ້ນປູ່ລາວ ແລະ ໄປຕັດຜົມໃຫ້ເຈົ້າກ່ຳນັ້ນ[82], ຜູ້ໃດຕັດຜູ້ນັ້ນຕ້ອງຕາຍໂລດ, ຂອງຕັດຜົມເພິ່ນລາຍບໍ່ໄດ້. ທາງພຸ້ນແອ່ນ, ຢາກຕີງທາງໃດກໍ່ຕີງ. ເພິ່ນຫັ້ນກໍ່ຕີງງວາກອີກ, ງວາກອີກແລ້ວ. ມັນກໍ່ລາຍຜົມ. ບາດນີ້ມີດຕັດປູ່ລຸງສີທັນກໍ່ງັບໂລດແລ້ວ, ເປັຍະໝິດແຮງໂລດແລ້ວ. ປູ່ລາວເວົ້າວ່າຢ່າຕີງມັນລາຍເຫັນຢູ່ບໍ! ເພິ່ນກໍ່ມິດໂລດແລ້ວ, ເຈົ້າກ່ຳກໍ່ເວົ້າ: ໄທບັກນີ້ມັນເກັ່ງແທ້ເນາະ! ປູ່ຂອງລຸງສີທັນເວົ້າ ໄທລູກຜູ້ຊາຍທຳມະດາມັນຕ້ອງເກັ່ງ! ມັນກໍ່ມິດໂລດແລ້ວ, ບໍ່ຕີງຈັກເມັດອັນເຈົ້າກ່ຳນັ້ນ. ແລ້ວປູ່ຂອງສີທັນກໍ່ຕັດແລ້ວ, ໂອງາມແລ້ວບາດນີ້, ງາມແລ້ວອາຍາ! ເຈົ້າກ່ຳວ່າໂອງາມແລ້ວບາດນີ້. ເຈົ້າກ່ຳບອກວ່າມື້ອື່ນມຶງມາປະຈຳກູ, ມາເປັນລືຄຳຫານໃຫ້ກູມັນເວົ້າ, (ລື

---

[81] ອ່າງຄຳແຕ່ກ່ອນເປັນເມືອງໜຶ່ງ ແຕ່ກ່ອນໃກ້ກັບຊາຍແດນລາວ-ຫວຽດນາມ, ຕໍ່ມາແມ່ນຂຶ້ນກັບເມືອງເຊໂປນ, ດຽວນີ້ຂຶ້ນກັບເມືອງວິລະບູລີ.

[82] ເຈົ້າກ່ຳເຈົ້າກາ ເປັນເຈົ້າກົກເຈົ້າເລົ່າ ຂອງຜູ້ໄທເຂດນີ້ ເພິ່ນຢາກຂ້າປູ່ຂອງລຸງສີທັນ ປູ່ຂອງລຸງສີທັນ ຈຶ່ງຍ້າຍໄປຢູ່ບ້ານນ້ຳປະເຄນປະຈຸບັນນີ້.

ຄຳຫານແມ່ນວ່າຜູ້ໃກ້ຊິດເພັດຊະຄາດ) ສະໄໝນັ້ນ. ຫຼັງຈາກນັ້ນປູ່ຂອງລຸງສີທັນວ່າໂດຍຂ້ານ້ອຍ! ເມື່ອເປັນແນວນັ້ນ ປູ່ຂອງລຸງສີທັນເພິ່ນກໍ່ເມືອລະດົມເມຍເພິ່ນ, ເອົາກັນໄດ້ 15 ວັນ, ແລະ ປົບມາຢູ່ບ້ານນ້ຳປະເຄນ, ຕັ້ງບ້ານຢູ່ບ້ານນ້ຳປະເຄນເກີດຂຶ້ນທຳອິດ, ປົບມາຫັ້ນຕັ້ງບ້ານຂຶ້ນມີເຮືອນຫຼັງດຽວ, ປູ່ຂອງລຸງສີທັນເພິ່ນບໍ່ຢາກເປັນລີຄຳຫານ (ບໍ່ຢາກຂ້າຄົນ) ລີຄຳຫານ ມັນໃຫ້ຕັດຄໍຄົນ ແລະບໍ່ຢາກເປັນ, ມັນເປັນແນວນັ້ນດອກ. ປູ່ຂອງລາວປົບມາຕັ້ງບ້ານຢູ່ບ້ານນ້ຳປະເຄນຫັ້ນ, ແລະກໍ່ໄດ້ປ້າ ແລະກໍ່ໄດ້ພໍ່ຂອງລາວ. ນ້າສາວຂອງລາວດຽວນີ້ເພິ່ນຕາຍໝົດແລ້ວຈຳນວນນັ້ນ. ປົບຈາກໂຕນັ້ນແລະມີພີ່ນ້ອງປູ່ລຸງສີທັນ ໄປນຳກັນຫ້າຫຼັງຄາເຮືອນ, ທຳອິດມາຢູ່ນ້ຳປະເຄນ. ຊີວິດຂອງປູ່ຍ່າລຸງສີທັນ ຢູ່ບ້ານນ້ຳປະເຄນຫັ້ນກໍ່ທຸກຍາກ, ບໍ່ມີເພື່ອນບໍ່ມີຝູງຫຍັງໝົດ, ຈັ່ງວ່າອາຍຸພໍ່ລາວ 30 ປີ ຈຶ່ງມາໄດ້ມາເອົາແມ່ຂອງລຸງສີທັນ, ລຸງສີທັນທຸກຍາກແຕ່ຍັງນ້ອຍທຸກອີ່ຫຼືໃດໄປຂໍທານ, ກິນເຂົ້າກິນກອຍກິນມັນ. ເວລານັ້ນແມ່ຂອງລຸງສີທັນໄດ້ໄປຂຸດມັນສູ່ກິນ, ມັນປ່າ, ບໍ່ແມ່ນມັນບ້ານ, ລ້ຽງລຸງສີທັນຈົນໃຫຍ່ 10 ປີ 11 ປີ, ຈຶ່ງເກີດການປະຕິວັດ, ປີ 1945 - 1946 ນີ້ລາວຈື່ແລ້ວ.

ພໍ່ລຸງສີທັນຫັ້ນໄປເຮັດການໃຫ້ຝຣັ່ງຄາວນັ້ນປີໜຶ່ງສາມສີ່ເທື່ອ, ຂອງພໍ່ວ່າລາວນີ້ໂງ່, ເປັນຄົນຊື່ ເຮັດອີ່ຫຼືອໍ່ຫຼໍໃດ, ຮອດມື້ນັ້ນແລະພໍ່ບ້ານເວົ້າວ່າເຈົ້າໄປເຮັດການທິວ, ບາດນີ້ການຈ້າງອີກ ພໍ່ບ້ານວ່າເພິ່ນຊິຈ້າງເຈົ້າໄປເຮັດ. ການຈ້າງນີ້ເດືອນໜຶ່ງ, ຄັນເຖິງຍາມຖາງໄຮ່ມັນກໍ່ບໍ່ໄດ້ຖາງແລ້ວ, ກໍ່ທຸກຍາກຢູ່ເຮືອນລາວນີ້. ຈົນອາຍຸຂອງລາວໄດ້ 11-12 ປີ, ຈຶ່ງຄ່ອຍຊ່ວຍແມ່ລາວໄດ້, ແຕ່ຫັ້ນກໍ່ຍັງຂາດຢູ່ຂາດກິນ, ເທົ່າລາວໃຫຍ່, ໃຫຍ່ແລ້ວກໍ່ພວກເພື່ອນປະຕິວັດຫວຽດນາມພົວພັນໂລດ. ພໍ່ລຸງສີທັນນີ້ໃຫ້ລຸງສີທັນເປັນຜູ້ສືບປິດພູຕາດ. ເພິ່ນບອກວິທີໃຫ້ລຸງສີທັນວ່າ: ເຈົ້າເອົາໝາກມ່ວງນີ້ໄປຂໍເກືອນຳມັນໄປ. ຂອງອ້າຍນ້ອງລາວໄປການປະຕິວັດໝົດ, ລຸງສີທັນໄປຫັ້ນແລ້ວ, ໄປລາວເຫັນປືນເຫັນພີ່

ສັງແລ້ວລາວກໍ່ມາລາຍງານໃຫ້ເພື່ອນທວຽດນາມ [83] . ຫຼັງຈາກນັ້ນກໍ່ມີຜູ້ໜຶ່ງທີ່ຮັກແພງກັບລຸງສີທັນແຕ່ຍັງນ້ອຍຈົນອາຍຸໄດ້ 17 ປີ, ອາຍຸລຸງສີທັນໄດ້ 22 ປີ ຈຶ່ງເອົາເມຍ, ລາວເອົາເມຍກັບບ້ານນັ້ນ, ເວລານັ້ນລາວໄດ້ເຂົ້າແລ້ວ. ເມຍລາວທຳອິດແມ່ນຊື່ນາງແພ່.

ແຕ່ກ່ອນພັ້ນລາວບໍ່ມີແລ້ວສົ້ງເສື້ອ, ແມ່ລາວເປັນຜູ້ຕ່ຳ ແລະກໍ່ຕັດໃຫ້ລາວ, ບາງເທື່ອແມ່ລາວຍ້ອມສົ້ງດຳເສື້ອດຳໃຫ້. ໃນເມື່ອລຸງສີທັນໃຫຍ່ຂຶ້ນມາຮູ້ເຮັດໄຮ່ເຮັດສວນ, ລາວບໍ່ໄດ້ເຮັດຕ່າງຫາກດອກ, ລາວກໍ່ເຮັດນຳກັນກັບພໍ່ແມ່. ລຸງສີທັນກໍ່ໃຫຍ່ແລ້ວເຮັດໄຮ່ເຮັດສວນໄດ້ແລ້ວ, ຄອບຄົວຂອງລາວກໍ່ບໍ່ອຶດແລ້ວບາດນີ້. ລຸງສີທັນເປັນລູກຊາຍກົກ, ບາດນີ້ລາວໄດ້ເຂົ້າພັກ ປີ 1956, ເຂົ້າຢູ່ໃນບ້ານນີ້ ທັງໝົດມີແຕ່ລາວເຂົ້າໜ່ວຍພັກທຳອິດ. ວິລະຊົນບ້ານນ້ຳປະເຄນກໍ່ແມ່ນໜ່ວຍພັກລາວນີ້ນຳພາ, ລາວນີ້ເປັນຜູ້ເຮັດເລຂາພັກ. ລຸງສີທັນເປັນເຈົ້າພາບແລ້ວຢູ່ໃນເຮືອນ, ເຂົ້ານ້ຳກໍ່ມີກິນ, ນອກຈາກນັ້ນແລະລຸງສີທັນຮຽນຈາກພໍ່ແມ່ຮຽນຈັກສານອີ່ຫຍັງ, ສານກະບຸງສານກະຕ່າ ຫຼືວ່າເຮັດແອບຫຼາຝາພີມ ເອີອັນນັ້ນລາວກໍ່ເຮັດເປັນ, ລາວເຮັດໄດ້ກະຍັງ, ກະບຸງກະດົ້ງກໍ່ເຮັດ, ຕິບເຂົ້າກໍ່ເຮັດ. ເລື່ອງການຫາກິນຫາຢູ່ລາວກໍ່ເຮັດກະທິບກະຕ່ຳ [84] , ເຮັດແຮ້ວເປັນ, ເວລານັ້ນລາວຮຽນນຳໝູ່ແລ, ລາວເຮັດໜ້າຍິງນົກກໍ່ເຮັດ, ຄວາມຮັກຄວາມແພງກັບພໍ່ແມ່ລາວແມ່ນຮັກທໍ່ນັ້ນ, ພໍ່ລາວກໍ່ບໍ່ຈົ່ມແມ່ລາວກໍ່ບໍ່ຈົ່ມໃຫ້.

ລຸງສີທັນບໍ່ໄດ້ໄປບຸນ, ລາວກໍ່ບໍ່ໄດ້ໄປ, ເພາະວ່າບໍ່ມີເຄື່ອງນຸ່ງ, ໄປແນວໃດລາວບໍ່ມີເຄື່ອງນຸ່ງ, ລາວບໍ່ໄດ້ໄປເລີຍ, ຈົນເທົ້າລາວໃຫຍ່ຂຶ້ນມາອາຍຸໄດ້ 13-14 ປີ, ລາວທັງໄປພົວພັນນຳທວຽດທັງໄປຂາຍເຄື່ອງເຮັດແນວນັ້ນລາວຂາຍສົ້ນຂາຍເສື້ອ, ເສື້ອດຳນົບນີ້ແລ້ວ, ແພຕະຫຼອງ, ສົ້ນນີ້ເຂົ້າບ້ານ

---

83 ເພື່ອນທວຽດນາມຄາວນັ້ນ ວ່າທວຽດມິນ ເຂົາຢູ່ປ່າ ບ່ອນລີ້ຊ່ອນ ລຸງສີທັນໄປລາຍງານໃຫ້ເພິ່ນພັ້ນ.

84 ກະທິບກະຕ່ຳກໍ່ແມ່ນແຮ້ວ ທີ່ທ້າງໃສ່ສັດປ່າ,ນົກ ໜູ ເຕົ່າ ແລນ..... ສັດນ້ອຍຖືກພົດ ຊຶ່ງເຂົ້າເຮັດດ້ວຍໄມ້ຕັນ, ບາດມັນລັ່ນແລ້ວທັບທົວສັດຕາຍ.

ເມືອງຫຼວງ, ສົ່ງລາວບ້ານເມືອງຫຼວງຫັ້ນ, ແມ່ສົ່ງລາວຢູ່ບ້ານຫັ້ນຮັກລາວ. ເພິ່ນວ່າໄອລູກສົ່ງວນີ້ບໍ່ມີເຄື່ອງນຸ່ງ, ເພິ່ນເອົາເຄື່ອງນຸ່ງໃຫ້ລຸງສີຫັນໄປຂາຍ, ລາວລັບໄປຂາຍ, ເຂົາຕີລາຄາ ແມ່ນວ່າຜືນໜຶ່ງ 5 ຢາດເງິນແຕ່ເກົ່າຫັ້ນ. ຫຼັງຈາກໄປຂາຍຢູ່ພຸ້ນແລ້ວລຸງສີຫັນໄດ້ຜືນໜຶ່ງກີບ. ລາວໄດ້ກຳໄລໂຕນັ້ນແລ້ວມາຊື້ເຄື່ອງນຸ່ງ, ຊື້ຜ້າຫົ່ມ, ມຸ້ງມາກາງນອນ. ແຕ່ກ່ອນບໍ່ມີມຸ້ງມາກາງນອນ, ອາຍຸລາວໄດ້ 13-14 ປີ ແລ້ວລາວໄດ້ຫາເງິນແນວນັ້ນ. ບາດນີ້ລາວໃຫຍ່ຂຶ້ນມາຄືແນວນັ້ນແລ້ວ, ລາວກໍ່ຮູ້ຈັກຄ້າຂາຍແລ້ວ. ໃຫຍ່ຂຶ້ນມາລຸງສີຫັນກໍ່ສ້າງຄອບຄົວ, ແລະລາວກໍ່ເຂົ້າເຮັດນຳການຈັດຕັ້ງເລີຍແລ້ວ, ຂອງລາວເຮັດການແຕ່ຍັງນ້ອຍເດ, ລາວພົວພັນກັບເພື່ອນອ້າຍນ້ອງຫວຽດນາມ. ແຕ່ລຸງສີຫັນຮຽນໜັງສືນຳຫວຽດ, ຫວຽດສອນໃຫ້ລາວຊື່ວ່າ ອຶງຫັນ, ມັນຢູ່ໃນເຮືອນກັບລຸງສີ ຫັນ, ຫວຽດຖາມໂຕນີ້ໂຕຫຍັງ? ລາວຂຽນໃສ່ບັ້ງໄມ້ພາງ[85], ບໍ່ແມ່ນວ່າຂຽນໃສ່ເຈ້ຍໃສ່ຫຍັງ, ລາວເອົາຖ່ານໄຟຂຽນໂຕນີ້ໂຕຫຍັງ! ລຸງສີຫັນຮຽນຈາກໂຕນັ້ນຮຽນໜັງສືກໍ່ດາຍ. ເປັນແນວນັ້ນຄວາມທຸກຍາກເຮົາຖືວ່າເປັນຄົນສັດຊື່ບໍລິ ສຸດຕໍ່ພໍ່ແມ່ຮັກພໍ່ຮັກແມ່. ອັນເພິ່ນເປັນໝໍຢາພື້ນເມືອງຊູ່ມື້ນີ້ບໍ່ແມ່ນນຳພໍ່ແມ່ຂອງລາວ. ລາວຮຽນໃໝ່ໆນີ້ດອກ, ຫວ່າງລາວເສຍອຶງຄະນີ້, ລາວເສຍອຶງຄະນີ້ລະ ລາວບໍ່ມີອາຊີບເຮັດ. ລາວລະໄປຮຽນໝໍຢາພື້ນເມືອງ. ໝໍຢາພື້ນເມືອງຜູ້ນີ້ ເພິ່ນມາແຕ່ອຸທຸມພອນພຸ້ນ, ຊື່ເພິ່ນວ່າພໍ່ຕັ້ງ, ເພິ່ນເກັ່ງທາງໝໍຮາກໄມ້ປົວຄົນ, ສະນັ້ນລຸງສີຫັນຕ້ອງໄປຮຽນນຳເພິ່ນ. ໄປຮຽນນຳເພິ່ນປີໜຶ່ງ, ເພິ່ນເປັນຜູ້ບອກຢາກົກນັ້ນຮາກໄມ້ອັນນັ້ນແກ້ອັ່ນນັ້ນ. ລຸງສີຫັນໄດ້ຮຽນໂຕນັ້ນ, ຈາກນັ້ນຕໍ່ມາຊູ່ມື້ນີ້ລາວຈຶ່ງເປັນວິຊາອາຊີບ.

---

[85] ລຸງສີຫັນເຮັດການນຳຫວຽດມິນ ພັດບໍ່ຮູ້ໜັງສືລາວ, ພະນັກງານຫວຽດນາມພັດຮູ້ໜັງສືລາວ, ເຂົາເຈົ້າສອນໜັງສືໃຫ້ລຸງສີຫັນ, ຖາມລຸງສີຫັນວ່າໂຕໜັງສືນີ້ແມ່ນຫຍັງ, ໂຕໜັງສືນັ້ນແມ່ນຫຍັງ, ວິທີຮຽນແມ່ນເອົາຂີ້ຖ່ານໄຟ ມາຂຽນໃສ່ບັ້ງໄມ້ພາງ ທີ່ເອົາມາຈາກປ່າ, ເພາະວ່າບໍ່ມີເຈ້ຍຂຽນ.

ບາດນີ້ໄລຍະທີ່ວ່າມີຜູ້ແສ້ຜູ້ສາວ, ພໍ່ແມ່ລຸງສີທັນບໍ່ຄຸມໃຫ້ເອົາເມຍ, ບໍ່ບັງຄັບໃຫ້ເອົາເມຍບໍ່ມີດອກແນວນັ້ນ. ມີແຕ່ຜູ້ດຽວອັນນັ້ນແລ້ວ, ອ້າຍສິນຫວັງມາແຕ່ສອງແຂວງ ປີ 1957 ແລະເອື້ອຍບົວຄື, ເອື້ອຍເພິ່ນເອງ. ເອື້ອຍນັ້ນມາແຕ່ສອງແຂວງຄືກັນ, ມາແລະເພິ່ນເຫັນລຸງສີທັນ, ແຕ່ຄອບຄົວຜູ້ສາວຫັ້ນບໍ່ມັກລຸງສີທັນບໍ່ມັກກໍ່ຢ່າ ຜູ້ສາວຫັ້ນມັກລຸງສີທັນ, ຂອງເຂົາຮູ້ເດວ່າລຸງສີທັນເຮັດຫຍັງ. ຄອບຄົວແມ່ຜູ້ສາວແລະບໍ່ຮູ້, ຈົນເອື້ອຍລຸງສີທັນມາຈຶ່ງຮູ້ວ່າລຸງສີທັນເປັນເລຂາພັກຢູ່ໃນບ້ານຫັ້ນ, ຖືວ່າດຳລົງຊີວິດຢູ່ຫັ້ນຂອງເອື້ອຍບົວຄືເປັນສຳມະຊິກພັກ, ເຂົາຮູ້ວ່າລຸງສີທັນເປັນເລຂາພັກຫັ້ນ, ປີ 1957-1958. ລຸງສີທັນນຳພາຢູ່ໃນບ້ານຫັ້ນ, ຖືວ່າບ້ານສາມັກຄີກັນແໜ້ນທີ່ສຸດ.

ເວລາມີການປະຕິວັດນໍບອກກັບຄວາມຫຍຸ້ງຍາກ, ສັບສົນໃນຊີວິດຂອງໂຕລຸງສີທັນຫັ້ນ, ລາວກໍ່ເກີດມີແນວຄິດປະຕິວັດຂຶ້ນ, ເກີດມີແນວຄິດຄຽດແຄ້ນສັດຕູ, ແມ່ນລາວບໍ່ໄດ້ປຶກສານຳພໍ່ແມ່, ເຂົາບໍ່ຮູ້ປິດລັບຮອດພໍ່ແມ່ຂອງລາວ. ພໍ່ຂອງລາວຫັ້ນຕາຍ ປີ 1958, ຍັງແຕ່ແມ່ລາວຫາກບໍ່ໄດ້ບອກ, ຍັງໝົດແຕ່ຫາກລາວບໍ່ໄດ້ບອກເຂົາ, ມີແຕ່ລາວຕິດຕໍ່ພົວພັນຢູ່ນາສະເລາະພີ້, ເພື່ອນຂອງລາວຖ້າຢູ່ພີ້. ມີແຕ່ລາວບອກແມ່ລາວວ່າ: ເຮົາຊິໄປຢາມສ່ຽວຢາມເຫີຍຢູ່ນາຍອກນາຍົມຄືນໜຶ່ງ, ໂຕນັ້ນລາວປິດລັບ, ເຂົາບໍ່ໄດ້ຮູ້ນຳລາວ, ເວລານັ້ນລັບທີ່ສຸດ, ບໍ່ແມ່ນລາວຂີ້ຕູຍອັນນີ້. ນີ້ລະແມ່ນວ່າຂະບວນການອອກຄັ້ງທຳອິດ, ແມ່ນລຸງສີທັນໄດ້ຮັບຄຳສັ່ງຈາກລຸງໄກສອນພຸ້ນ, ຄຳສັ່ງເພິ່ນວ່າ ເຮົາຈຶ່ງເຕົ້າໂຮມ ໝົດພວກມາແຕ່ສອງແຂວງ, ຄືລຸງສີທັນໄດ້ເລົ່າເມື່ອກ່ອນນັ້ນ, ແລະຂະບວນການມັນເກີດຂຶ້ນບ່ອນທຳອິດນີ້ທີ່ບ້ານນ້ຳປະເຄນ[86], ໃຜກໍ່ຮູ້ໝົດ ນັບແຕ່ເຈົ້າແຂວງ. ປີ 1960 ແມ່ນວ່າເຈົ້າແຂວງໄຊຄູຄຳ[87] ຕັ້ງຢູ່ບ້ານລຸງສີທັນນີ້ ກໍ

---

86 ບ້ານນ້ຳປະເຄນ ຢູ່ທາງທິດຕາເວັນອອກ ຂອງເມືອງວິລະບູລີ ໄກປະມານ 15 ກິໂລແມັດ. ແຕ່ຄາວຕໍ່ຕ້ານບ້ານນີ້ເປັນບ້ານອິດສະຫຼະ ອາໃສຢູ່ທຳອິດ.

87 ລຸງໄຊຄູຄຳ ຄົນຈຳປາສັກ, ຄາວຕໍ່ຕ້ານເພິ່ນມາເປັນເຈົ້າແຂວງສະຫວັນນະເຂດ ຢູ່ບ້ານນ້ຳປະເຄນນີ້. ດຽວນີ້ເພິ່ນອອກພັກຜ່ອນແລ້ວ.

ອາໄສພ່ອຍພັກລາວທັ້ນ. ຫຼັງຈາກນັ້ນ ລະແມ່ນທ່ານໄກສອນເພິ່ນເອີ້ນ, ໄລຍະປີ1969ລຸງສີທັນໄດ້ໄປຮຽນທີ່ສູນທັນ ແລະປີໜຶ່ງ, ລາວຮຽນການເມືອງການທະຫານແລ້ວກັບມາ, ແລ້ວໃຫ້ລາວເປັນກອງບັນຊາການທະຫານເມືອງ. ເວລາລຸງ ສີທັນເປັນໄວລຸ້ນ ຫຼືວ່າເຂົ້າເປັນອິດສະຫຼະນີ້, ລາວມັກຟ້ອນຫຼືວ່າລຳ. ເວລາມີບຸນມີທານທັ້ນລາວມັກຟ້ອນ. ສະໄໝຕໍ່ຕ້ານລາວຮ້ອງເພງຕໍ່ຕ້ານ, ເພງອິດທິນລາວກໍ່ຮ້ອງຢູ່, ຮ້ອງນຳໝູ່ທັ້ນແລ້ວ. ຮ້ອງຍາມນັ້ນ ພວກເພິ່ນດັງໄຟເປັນກອງບັກໃຫ່ຍ, ໝົດໄທບ້ານມາພາກັນມ່ວນຊື່ນ, ຟ້ອນອ້ອມກອງໄຟທັ້ນ. ບາດສ່ວນຕົວລາວນີ້ມັກສີຊໍ, ຟ້ອນກໍ່ຟ້ອນ, ສີຊໍນີ້ລາວນ້ຳເບີໜຶ່ງ ແລະ ມັກ. ອາຍຸລາວປີນີ້ໄດ້ 70 ປີ ເກີດ ຢູ່ບ້ານນ້ຳປະເຄນ.

ຕາມທີ່ລຸງສີທັນຈື່ໄດ້ ກອງໄຊຈັກກະພັດໄດ້ສ້າງຕັ້ງຂຶ້ນຢູ່ທ່າແຂກໃນປີ 1946, ໂດຍແມ່ນ ເຈົ້າສະເດັດສຸພານຸວົງ ບັນຊາກອງຮ້ອຍ, ເວລານັ້ນຕີກັບຝຣັ່ງ, ຝຣັ່ງກັບຕ່າວຄືນມາ, ຊຶ່ງກະໂຕ ທ່າແຂກມີຮອດກອນລຳວ່າ:

ສາວທາບນ້ຳ ມັນຊິມທຳເຖ[88]

ສຳເລັດແລ້ວຍິງຖິ້ມລ່ອງໄຫຼ

ຄວາມຄຽດແຄ້ນທີ່ຝຣັ່ງເຮັດໃຫ້ປະຊາຊົນທ່າແຂກຄື: ເດັກນ້ອຍມັນໃສ່ກະເປົາຖິ້ມລົງນ້ຳ, ຝຣັ່ງເຮັດອີ່ຫຼີກັບພວກເຮົາ, ເວລານີ້ ເຈົ້າສະເດັດສຸພານຸວົງຖືກຈັບຈຶ່ງຖອຍ ຂ້າມເມືອປົວຢູ່ຝັ່ງໄທແລ້ວ ຈຶ່ງກັງວນມາທາງຈຳປາສັກໄປຢູ່ ແລະເຄື່ອນໄຫວຢູ່ຈຳປາສັກ.

ລຸງສີທັນວ່າ: ກອງໄຊເສດຖາທິລາດເກີດຢູ່ເມືອງເຊໂປນ, ບັນຊາກອງຮ້ອຍແມ່ນອ້າຍສຸວັນທອນ. ກອງຮ້ອຍຫວຽດອີກກອງໜຶ່ງແມ່ນອາຍາໂອໄປຂໍນຳຫວຽດຢູ່ກວາງຈີ ເຂດ 4 ຂອງຫວຽດພຸ້ນມາ, ມາບວກເຂົ້າກັນກັບກອງໄຊເສດຖາທິລາດ ເປັນກອງທະຫານປະສົມລາວ-ຫວຽດ. ກອງທະຫານດັ່ງກ່າວນີ້ ໄດ້ຕີຕ້ານກັບສັດຕູຕັ້ງແຕ່ເຊໂປນຈົນຮອດຫົວທ່າແຂກ. ຈາກນັ້ນຝຣັ່ງມັນຖູ

---

[88] ກອນເຂົາແຕ່ງນັ້ນ ເວົ້າເຖິງຄວາມໂຫດຫ້ຽມຂອງຝຣັ່ງຕໍ່ຜູ້ຍິງລາວ, ເຂົາຫຼິ້ນແລ້ວເຂົາຂ້າໄຫຼນ້ຳເລີຍ.

ຄົນ, ກອງທະຫານເຮົາກໍ່ຖອຍກັບຈີນເຖິງນາຣີເຊໂປນ, ທະຫານເຮົາ ແລະ ຝຣັ່ງກໍ່ຈັ່ງກັນຢູ່ທີ່ນັ້ນ, ທະຫານຝຣັ່ງມາໜຶ່ງກອງພັນ, ເຮົາມີພຽງ 2 ກອງຮ້ອຍ, ຕີມັນຢູ່ຫັ້ນ, ຍຶດອາວຸດໄດ້ມາ 27 ເປົາ, ປືນເຕັມສາມລຳກວຽນ, ພວກຝຣັ່ງມັນເສຍໄຊ. ໃນປີ 1946 ການຈັດຕັ້ງເຄື່ອນໄຫວ ຕີກັບຝຣັ່ງຢູ່ເຂດກາງ ແມ່ນຕັ້ງເປັນກຸ່ມໃຜກຸ່ມມັນ, ເຂດນ້ຳປະເຄນກໍ່ຈັດຕັ້ງໜຶ່ງກອງຮ້ອຍຄືກັນ ໄປຕັ້ງທັບຢູ່ບ້ານອ່າງຄຳ, ຜູ້ບັນຊາແມ່ນອາຍາລິບແຂນກຸດ,ລາວເປັນຄົນຍີ່ປຸ່ນ. ສ່ວນຢູ່ບ້ານວັງພາຕາແສງຊຸນແຊ ແມ່ນທ່ານຄຳໄຕ ບັນຊາກອງຮ້ອຍ, ທະຫານຂອງທ່ານຄຳໄຕ ກໍ່ຍັງມີຊີວິດຢູ່ຄືອ້າຍປະຈຸມ. ຫຼັງຈາກລຸງສຸພານຸວົງ ໄປເຄື່ອນໄຫວຢູ່ຈຳປາສັກ ແມ່ນເຄື່ອນໄຫວກັບລຸງສີທົນ ກົມມະດຳ. ກອງລາດຊະວົງ ແມ່ນ ທ່ານໄກສອນ ສ້າງຕັ້ງຂຶ້ນຢູ່ຊຳເໜືອ, ກອງໄຊຈັກກະພັດ ແລະ ກອງໄຊເສດຖາທິລາດ ບໍ່ແມ່ນພັກຕັ້ງຂຶ້ນ ແຕ່ກໍ່ມີຊື່ໃນປະຫວັດສາດ ເພາະຕັ້ງເອງ ດ້ວຍຄວາມຄຽດແຄ້ນຂອງຕົນເອງ ໂດຍບໍ່ແມ່ນພັກຄອມມູຍນິດຕັ້ງຂຶ້ນ, ກອງທະຫານຂອງທ່ານໄກສອນ ສ້າງຕັ້ງຂຶ້ນ ມີ 25 ຄົນ. ສ່ວນຢູ່ທ່າແຂກ ແມ່ນເຈົ້າສະເດັດສຸພານຸວົງ ເປັນຫົວໜ້າບັນຊາມີຮອດກອງຮ້ອຍ, ຕີກັບຝຣັ່ງທະຫານຂອງເຂົາກໍ່ຕາຍ ແລະ ຖືກເຈັບຫຼາຍຄົນ, ເຂົາບໍ່ແພ້ຝຣັ່ງຈຶ່ງໄດ້ຖອຍໃຫ້ຝຣັ່ງ. ຮອດປີ 1954 ຈຶ່ງໄດ້ເຕົ້າໂຮມ 2 ແຂວງ ເວລານັ້ນ ພັກເຄື່ອນໄຫວ ແລະ ປຸກລະດົມຂະບວນການຕໍ່ສູ້ຮັກສາສອງແຂວງເຕົ້າໂຮມ, ໃນໄລຍະນັ້ນ ບໍ່ຮູ້ຈັກດອກວ່າ ຜູ້ໃດເປັນສຳມະຊິກພັກຄອມມູຍນິດ. ເວລານັ້ນ ຢູ່ລາວມີ 4 ກອງທະຫານຕາມທີ່ໄດ້ຍິນຄື: ກອງລາດຊະວົງ, ກອງເຈົ້າຟ້າປັດໃຈ, ກອງໄຊຈັກກະພັດ ແລະ ກອງໄຊເສດຖາທິລາດ. ບັນດາກອງທະຫານນີ້ ອາດຈະປະຊື່ບໍ່ໄດ້ເພາະມັນເປັນຂະບວນການຕໍ່ສູ້ໃນປະຫວັດສາດຂອງປະຊາຊົນລາວເອງ.

ນັ້ນແມ່ນຂະບວນການຕໍ່ສູ້ຕ້ານຝຣັ່ງຂອງປະຊາຊົນລາວເຮົາ; ສ່ວນລຸງສີທົນເອງແລ້ວ ໄດ້ເຂົ້າຮ່ວມການເຄື່ອນໄຫວການຕ້ານຝຣັ່ງ ແຕ່ວັນທີ 2/2/1948, ທຳອິດແມ່ນລາວໄປເປັນຕິດຕໍ່ສືບຂ່າວໃຫ້ກອງກັບຫວຽດນາມ. ຫຼັງ

ຈາກນັ້ນປີ 1950 ເພິ່ນໄດ້ຈັດຕັ້ງລັດຖະບານລາວຕໍ່ຕ້ານ. ລາວເວລານັ້ນ ກໍ່ຍັງເປັນຕິດຕໍ່ສືບຂ່າວຄືກັນ, ໄປສືບຂ່າວປົດກຸດບາດ, ປົດກຸດນ້ຳຈະໂລະ, ປົດນ້ຳເລີກ, ໄປສືບຂ່າວໄດ້ມາລາຍງານໃຫ້ກອງທັບຫວຽດນາມ, ກອງທັບຫວຽດນາມຮູ້ຈັກສະພາບຢູ່ໃນປົດເປັນຄືແນວໃດ. ວິທີເຂົ້າໄປສືບຂ່າວຂອງລາວແມ່ນເອົາໝາກມ່ວງ, ໝາກບັດເຂົ້າໄປຂາຍ, ໄປຂໍເກືອນຳມັນ, ມັນເອົາເກືອໃຫ້ລາວ. ຮອດປີ 1950 ຫວຽດນາມໄດ້ຈັດຕັ້ງລຸງສີທັນເປັນກອງຫຼອນ, ຕີປົດ, ຕີຄ້າຍ, ຕີກອງປຸ້ນນ້ຳຈະໂລະ, ພວກສັດຕູຖືກແຕກຈາກປົດພູຕາດແລ້ວມາເຕົ້າໂຮມຢູ່ປົດນ້ຳຈະໂລະ, ລຸງສີທັນ ແລະ ໝູ່ໄປອ້ອມປົດນ້ຳຈະໂລະ, ສັດຕູປົບ.

ຮອດປີ 1954-1957 ຍຸດສົງຄາມຝຣັ່ງ, ຫວຽດນາມ ແລະ ລາວຕີໄຊຊະນະປົດປ່ອຍດຽນບຽນຟູ. ຫຼັງຈາກນັ້ນທາງຂັ້ນເທິງໃຫ້ສະໝັກຂຶ້ນເມືອຊຳເໜືອ ແລະ ຜົ້ງສາລີ, ລຸງສີທັນ ໄດ້ເປັນຜູ້ໜຶ່ງທີ່ສະໝັກເຂົ້າເປັນທະຫານເພື່ອຮັກສາ 2 ແຂວງເຕົ້າໂຮມ. ຈາກນັ້ນລາວກໍ່ເຂົ້າໂບນຄຳ, ຕາແສງບົວຊຶ່ງເປັນອາວແລະເປັນພີ່ນ້ອງຂອງລາວ, ທ່ານພໍ່ອາວຂອງລຸງສີທັນບອກວ່າດຽວນີ້ຫຼານບໍ່ໄປໃຫ້ຫຼານຢູ່ນີ້. ແລ້ວສ້າງຮາກຖານຢູ່ນີ້ໃນ 10 ແຂວງນີ້. ເມື່ອບໍ່ໄດ້ໄປລຸງສີທັນເອງກໍ່ຢູ່, ລາວຢູ່ໄປດົນທາງເພື່ອນຫວຽດນາມກໍ່ມາ, ພະນັກງານຫວຽດນາມມາຢູ່ນ້ຳເລີກຢູ່ໃນປ່າພຸ້ນ, ລຸງສີທັນເອງກໍ່ເຂົ້າເຮັດວຽກກັບອ້າຍນ້ອງທະຫານຫວຽດນາມ, ໜ້າທີ່ຂອງລາວເວລານັ້ນແມ່ນເອົາຂ່າວ, ລາວເອງເປັນຜູ້ແລ່ນເອົາຂ່າວໃຫ້ກອງທັບຫວຽດນາມ, ຜູ້ທີ່ເຄື່ອນໄຫວຢູ່ນຳລາວ ແລະ ຮູ້ຈັກກັບລາວແທ້ໆແມ່ນອິງຖິ່ນ, ສ່ວນຄົນລາວແມ່ນທ່ານວັນທາ. ວັນທີ 13/7/1956 ລຸງສີທັນເອງໄດ້ເຂົ້າພັກປະຊາຊົນລາວມີສຳມະຊິກ 4 ຄົນ, ລາວເປັນເລຂາໜ່ວຍພັກຮາກຖານ. ຫຼັງຈາກນັ້ນ ແມ່ນໜ່ວຍພັກອື່ນ, ການເຄື່ອນໄຫວຂອງພັກຄອມມູຍນິດໄດ້ຄວບຄຸມໝົດຮອດຕາແສງນ້ຳຈະໂລະ, ຕາແສງອ່າງຄຳ, ຕາແສງກົກໝາກ ແລະ ຕາແສງນາຫ້ວຍ, 4 ຕາແສງໜ່ວຍພັກຂອງລາວນີ້ຄວບຄຸມ. ຫຼັງຈາກນັ້ນ ເຂົ້າລາວລວມລາວ ແລະ ປ່ອນບັດຄັດເລືອກ

ຕັ້ງໃນເດືອນ 10 ປີ 1958, ໄດ້ມີຜູ້ແທນເຂດປ່ອນບັດລາວລວມລາວ 12 ທ່ານ, ທ່ານໄກສອນຖືກໄປອັດຕະປື, ເຂົາໂລບບັດເພີ່ນ, ເພີ່ນຈຶ່ງໂຕນອອກ, ຈາກນັ້ນເພີ່ນໄດ້ເຮັດໜັງສືສັ່ງໃຫ້ໜ່ວຍພັກຂອງລຸງສີທັນ (ໜັງສືນີ້ ເພີ່ນເຮັດຢູ່ຮ່າໂນ້ຍ ໂດຍຜ່ານທະຫານເພື່ອນຫວຽດນາມ ເອົາມາໃຫ້ໜ່ວຍພັກລຸງສີທັນ). ທ່ານໄກສອນ ໄດ້ສັ່ງໃຫ້ໜ່ວຍພັກຂອງລຸງສີທັນນີ້ ທັນທີດຕໍ່ສູ້ເວລານັ້ນ ມີລຸງສີທັນນີ້, ລຸງອິນກອງ, ມີ 6 ຄົນ ເປັນສຳມະຊິກພັກ, ລຸງສີທັນເອງເປັນເລຂາໜ່ວຍພັກ. ເອົາທ່ານສິມຫວັງ, ທ່ານກວາງ 3 ຄົນ ໄປຄົ້ນຄວ້ານຳກັນ ແລະໄດ້ຕົກລົງກັນວ່າ: "ດຽວນີ້ຕ້ອງທັນທີດ, ຄຳສັ່ງເພີ່ນໃຫ້ທັນທີດ ແລ້ວຈະເຮັດແນວໃດ?" ພວກລຸງສີທັນໄດ້ໄປເຕົ້າໂຮມໝົດ, ພວກຄົນທີ່ມາແຕ່ 2 ແຂວງນັ້ນ, ມາແລ້ວພວກເພີ່ນກໍ່ສຶກສາອົບຮົມ. ວັນທີ 20/3/1959 ພວກລຸງສີທັນວາງແຜນໄປຍຶດເອົາປືນເມືອງບົວລະພາໄດ້ 83 ກະບອກ, ປະກອບໃຫ້ທະຫານແນວລາວຕີປົດອ່າງຄຳ ເຮັດໃຫ້ເຂດດັ່ງກ່າວນັ້ນເປັນເຂດປອດໄພໃນສອງຕາແສງເມືອງບົວລະພາ, ຕາແສງນາສະລອນກັບຕາແສງໂກນຈຽງ ເປັນເຂດອິດສະຫຼະແລະເຂດທີ່ພົ້ນກ່ອນ. ຫຼັງຈາກນັ້ນພວກລຸງສີທັນກໍ່ຍຶດເອົາປືນຂອງສັດຕູມາປະກອບໃຫ້ຄົນພື້ນຖານທັງໝົດ, ເຂດນັ້ນເປັນເຂດປອດອາວຸດ. ໄປຕີປົດສະໂລຍໂດຍແມ່ນອ້າຍອິນກອງພາອ້າຍນ້ອງໄປ. ເວລານັ້ນລຸງສີທັນຍັງບໍ່ທັນເສຍຄວາມລັບ, ລາວເອງເປັນຜູ້ປຶກສາຫາລືວາງແຜນ ແລະ ຕົກລົງວຽກງານການເຄື່ອນໄຫວຕີສັດຕູຢູ່ບ້ານນ້ຳປະເຄນ, ຫຼັງຈາກນັ້ນລາວເສຍລັບແລ້ວ ເພາະມີນັກສືບພາຍໃນເຂົາຮູ້ວ່າບ້ານນ້ຳປະເຄນນີ້ມີໜ່ວຍພັກ, ວ່າເລຂາແມ່ນຜູ້ນັ້ນ. ໂກໂລແບນສິມ ໂກໂລແບນສິມສັກ, ແຕ່ລາວເຂົ້າໄປຢູ່ປ່າແລ້ວ. ມັນວ່າຄັນບໍ່ໄດ້ຜູ້ນີ້, ສີທັນນີ້ແມ່ນພວກມັນຈະຂ້າປະຊາຊົນ ບ້ານນ້ຳປະເຄນໃຫ້ຕາຍໝົດບໍ່ໃຫ້ຍັງຈັກຄົນ. ນາຍພົນສິມສັກໃຫ້ປະຕິບັດສາມກັ້ງງ. ເມື່ອລຸງສີທັນປຶກສານຳກັນວ່າ ສັດຕູຈະຂ້າໝົດບ້ານຖ້າບໍ່ໄດ້ລຸງສີທັນ. ສຸດທ້າຍເພື່ອນສະຫາຍຂອງລາວຈຶ່ງເວົ້າວ່າ: "ຖ້າເຈົ້າເອງອອກໄປ ແລ້ວມັນກໍ່ຈະຂ້າຖິ້ມໂລດ". ປະຊາຊົນຜູ້ໃດກໍ່ໄຫ້ໝົດ ນັບທັງພໍ່ບ້ານ ບ້ານນ້ຳປະເຄນໂສກເສົ້າ

ທ່ວມເຫງົາໝົດບ້ານ. ຫຼັງຈາກນັ້ນລຸງສີທັນກໍ່ອອກຈາກບ້ານໄປ, ເມື່ອລາວໄປຮອດຕາແສງຊຽງທອງລາວເອງແວ່ເຂົ້າໄປຫານ້າບ່າວຂອງລາວເອີ້ນວ່າ: "ນ້າບ່າວຊ່ວຍຫຼານແດ່, ເຂົາຊິຂ້າຫຼານແລ້ວອາຍາຕາແສງເອີຍ! ເພິ່ນວ່າເອີໄດ້ແລ້ວ, ເພິ່ນຊິຂຶ້ນເມືອບອກແກ່ນຈັນກ່ອນເດີ". ນ້າບ່າວຂອງລຸງສີທັນ ກໍ່ອອກໄປຫາແກ່ນຈັນຫຼັງຈາກນັ້ນເພິ່ນກໍ່ກັບມາ ແລະ ເວົ້າກັບລຸງສີທັນວ່າ: "ແກ່ນຈັນມັນວ່າມຶງນີ້ ເປັນຄອມມຸຍນິດແມ່ນບໍ? ແລ້ວນ້າບ່າວ ກໍ່ພາຕົນໄປຫາແກ່ນຈັນ.ເມື່ອຕົນລຸງສີທັນໄປເຖິງແກ່ນຈັນເວົ້າໂລດວ່າ: ມຶງນີ້ເປັນຄອມມຸຍນິດແມ່ນບໍ? ລຸງສີທັນໄດ້ຕອບແກ່ນຈັນວ່າ: "ຂ້ານ້ອຍເປັນຄອມມຸຍນິດ, ຂ້ານ້ອຍບໍ່ໄດ້ໄປສອງແຂວງເຕົ້າໂຮມນຳເຂົາ, ທ່ານຄຶດຄັກໆ ແກ່ນຈັນວ່າ: ບໍ! ເຂົາລາຍງານກູຄັກໆແລ້ວ, ແຈ້ງແລ້ວ. (ຕົວຈິງແມ່ນແທ້ໆ ມື້ລຸງສີທັນປະຊຸມນີ້, ໜ່ວຍພັກກໍ່ມາປະຊຸມກັນຢູ່ຫັ້ນແທ້, ລຸງສີທັນໄດ້ເຕົ້າໂຮມລວມທັງໝົດຄົນທີ່ມາຈາກ 2 ແຂວງສະຫວັນນະເຂດ ແລະ ສາລະວັນ, ລຸງສີທັນເປັນຜູ້ອະທິບາຍໃຫ້ພວກເຂົາວິທີໂຕນອອກຈາກເຂດຂອງສັດຕູໄປເຕົ້າໂຮມຢູ່ 2 ແຂວງຊໍາເໜືອ ແລະ ຜົ້ງສາລີແນວໃດ, ອອກພ້ອມກັນແນວໃດ). ລຸງສີທັນຈຶ່ງໄດ້ຕອບແກ່ນຈັນວ່າ: "ໂຕເວົ້າວ່າຂ້ານ້ອຍປະຊຸມຊຸດນັ້ນບໍ?, ໂຕເວົ້າເວລານັ້ນພວກຂ້ານ້ອຍປະຊຸມເຮັດປຸນ ແລະ ກໍ່ປັນປຸນກັນ". ມັນຖາມວ່າ: ຜູ້ໜຶ່ງໄດ້ເທົ່າໃດປຸນນັ້ນ, ຍັງມີຄົນມາບອກກູອີກວ່າມຶງປະຊຸມອີກ ເຕົ້າໂຮມເຂົາ! ລຸງສີທັນໄດ້ຕອບມັນອີກວ່າ: ແມ່ນຢູ່ຂ້ານ້ອຍປະຊຸມເຂົາແທ້, ແຕ່ຂ້ານ້ອຍເຮັດເອົາເຜິ້ງ, ມັນມີຮອດ 300 ຮັງພຸ້ນ ອາຍາເອີຍ. ເອົາເຜິ້ງແລ້ວຫຼັງຈາກນັ້ນພວກຂ້ານ້ອຍກໍ່ມາປັນກັນ. ແກ່ນຈັນມັນເວົ້າລຸງສີທັນອີກວ່າ: ມຶງປະຊຸມອີກບ່ອນໜຶ່ງ, ລຸງສີທັນຕອບມັນອີກວ່າ: "ປະຊຸມແທ້ແນວເຮັດຮົ້ວຫັ້ນ, ບໍ່ເຮັດຮົ້ວຄວາຍກໍ່ເຂົ້າກິນເຂົ້າ, ໝູກໍ່ເຂົ້າກິນເຂົ້າຂອງຊາວບ້ານລະບໍ, ດັ່ງນັ້ນຈຶ່ງປະຊຸມກັນເພື່ອເຮັດຮົ້ວ". ມັນເອົາປືນມາຈີ້ໜ້າຜາກລຸງສີທັນ ແລະເວົ້າວ່າ: ມຶງຕາຍມື້ນີ້, ມຶງເປັນເລຂາພັກຄອມມຸຍນິດ. ລຸງສີທັນໄດ້ເວົ້າກັບມັນວ່າ: ໂຍ່! ຂ້ານ້ອຍ, ຢ່າຟ້າວລັ່ນປືນ, ຂໍໃຫ້ຂ້ານ້ອຍຈົກບັດກ່ອນ! ລຸງສີທັນກໍ່ຈົກບັດໃຫ້ມັນເບິ່ງ, ລຸງສີ

ທັນເວົ້າວ່າ: ນີ້ບັດຂ້ານ້ອຍເອົາໂລດ! ມັນອ່ານເບິ່ງເຫັນບົງສຸວັນນະວົງ ເລຂາພັກລາວລວມສໍາພັນມອບໃຫ້ລຸງສີທົນເອງ ເປັນເລຂາພັກໃນເມືອງເຊໂປນນີ້, ເມື່ອມັນເຫັນແນວນັ້ນມັນກໍ່ເອົາປືນລົງ ແລະກໍ່ປືນເຂົ້າໃສ່ກັບ, ລຸງສີທັນເວົ້າວ່າ: ຂ້ານ້ອຍເຮັດຂອງຂ້ານ້ອຍເຮັດຕາມຄໍາສັ່ງຂອງທ່ານສຸວັນນະວົງ ເປັນເລຂາພັກລາວລວມສໍາພັນ ທັງເປັນປະທານສະພາແຫ່ງຊາດຢູ່ວຽງຈັນພຸ້ນ! ໂຕເວົ້າແນວນັ້ນ", ເມື່ອເປັນແນວນັ້ນມັນວ່າ: "ກູເອົາເດີບັດອັນນີ້ເດີ, ກູຊິເອົາໃຫ້ໂກໂລແນນສິນສັກ ເບິ່ງເພາະເພິ່ນສັ່ງເດັດຂາດ, ກູຊິວ່າມຶງບໍ່ໄດ້ເຮັດອີ່ຫຼີ, ບໍ່ໄດ້ຜິດອີ່ຫຼີ, ກູຊິວ່າກູຂ້າມຶງແລ້ວ, ລາຍງານໂກໂລແນນສິນສັກ ແລະ ມັນເວົ້າວ່າມຶງເມືອສາ". ຫຼັງຈາກນັ້ນລຸງສີທັນກໍ່ມາ. ເມື່ອລາວມາຮອດບ້ານ ປະຊາຊົນດີໃຈເພາະໃຜກໍ່ວ່າລາວຊິຕາຍເດ. ຕົວຈິງລຸງສີທັນເອງພັດບໍ່ຕາຍ. ຕ່າງຝ່າຍກໍ່ດີໃຈ. ເວົ້າລວມແລ້ວລຸງສີທັນໄດ້ເຮັດແນວນັ້ນ. ຫຼັງຈາກນັ້ນລາວກໍ່ໄດ້ປຶກສາວາງແຜນຕີປິດອ່າງຄໍາ, ພວກເພິ່ນນີ້ແລ້ວຕີ, ມີແຕ່ໜ່ວຍພັກລາວຮູ້,ບໍ່ໃຫ້ໃຜຮູ້, ພວກເພິ່ນຕີປິດສໍາເລັດ, ສັດຕູຕາຍຜູ້ໜຶ່ງ, ພວກລຸງສີທັນຍຶດໄດ້ປືນ, ຍຶດໄດ້ເງິນ, ໄປຍຶດໄດ້ເອກກະສານຊຶ່ງມີລາຍຊື່ຂອງນັກສືບແຕ່ລະຄົນ ແລະ ນາຍທະຫານຢູ່ອ່າງຄໍາ, ມີລາຍຊື່ພວກລຸງສີທັນ, ເພາະພວກທີ່ບໍ່ຫວັງດີໄປລາຍງານໃຫ້ພວກສັດຕູຮູ້ວ່າ ຜູ້ນີ້ຜູ້ນັ້ນເປັນເລຂາພັກ, ລຸງສີທັນເອງຈໍາຕ້ອງຢຸດການເຄື່ອນໄຫວຊົ່ວຄາວໄລຍະໜຶ່ງ.

ເຖິງເດືອນ 6 ປີ 1969 ເພິ່ນສັ່ງໃຫ້ລຸງສີທັນໄປຮຽນຢູ່ຊອນທັນ, ເວລານັ້ນພໍດີກອງພັນ ໂຕນອອກຈາກທົ່ງໄຫຫີນ ແລະ ມາເຖິງຊອນທັນ ໃນວັນທີ 18/3/1959, ລຸງສີທັນເອງ ກໍ່ໄດ້ພົບກັບກອງພັນທີ່ສອງຢູ່ຊອນທັນ. ລາວຮຽນການເມືອງຢູ່ຫັ້ນໄດ້ 9 ເດືອນຫຼັງຈາກນັ້ນ ລາວກໍ່ກັບຄືນມາຂົນຂວາຍຢູ່ໃນເມືອງເຊໂປນ. ລາວກໍ່ກັບລົງມາເພື່ອປຸກລະດົມ, ຂົນຂວາຍຢູ່ທ້ອງຖິ່ນທາງພາກໃຕ້ຕໍ່, ລາວລົງເຖິງແຂວງພໍດີໄດ້ຂ່າວເມຍລາວຕາຍ ຍ້ອນເກີດລູກຢູ່ບ້ານ. ເວລານັ້ນ ສັດຕູແຕກປົດອໍານາດລົງມາເຕົ້າໂຮມຢູ່ທິວພູເວີນ, ພວກລຸງສີທັນກໍາລັງອ້ອມຕີສັດຕູຢູ່ໃນວັງຍາມກາງຄືນ. ປາກົດວ່າມີນາງແມວ

ຂຶ້ນໄປປະຈຳຢູ່ພູນາດຕິງນັ້ນ ແລະ ສິ່ງສຽງຮ້ອງໄຫ້, ລຸງສີທັນວ່າແມ່ນໃຜເດ, ນ້າໃຜຢູ່ໃນວັງນີ້,ລາວເອງຄິດຢ່າງນັ້ນ, ເພາະຢູ່ໃກ້ໆກັບສັດຕູ, ພໍໃກ້ຊິແຈ້ງສັດຕູກໍ່ຖອຍ, ເມື່ອມັນຖອຍພວກລຸງສີທັນກໍ່ຍິງຕາຍສັດຕູຜູ້ໜຶ່ງ, ສັດຕູຖອຍມານ້ຳຈະໂລະເລີຍ. ຫຼັງຈາກນັ້ນ ລຸງສີທັນຈຶ່ງເຂົ້າໄປໃນຫ້ອງບັນຊາການ ພວກເຂົາຈຶ່ງບອກລຸງສີທັນວ່າ: ໂອ! ເມຍເຈົ້າຕາຍ ແລ້ວ! ຍັງແຕ່ລູກ, ເປັນຜູ້ຊາຍ. ເມື່ອລາວໄດ້ຍິນເຊັ່ນນັ້ນ, ນ້ຳຕາຕົນເອງໄຫຼອອກມາຍາມໃດບໍ່ຮູ້ເມື່ອ, ໃນເວລານັ້ນລາວແສນທໍລະມານຈິດໃຈທີ່ສຸດ, ລາວເອງຄິດເຫັນພາບເມຍລາວກ່ອນທີ່ຕົນຈະອອກເຮັດການປະຕິວັດທຳອິດ, ເມຍຂໍໄປນຳ, ລາວໄດ້ບອກເມຍວ່າ: "ເຈົ້າຢ່າຟ້າວໄປ, ບາດນັ້ນເຈົ້າຈຶ່ງໄປ, ໄປນຳຂ້ອຍເວລານີ້ບໍ່ໄດ້ດອກ, ຂ້ອຍໄປຮຽນໜາ". ຫຼັງຈາກເມຍຂອງລາວຕາຍ, ແລ້ວລູກລາວກໍ່ບໍ່ມີຜູ້ລ້ຽງ, ບໍ່ມີນົມໃຫ້ກິນ, ລາວຄິດຮອດເມຍ ແລະ ອີ່ດູສິງສານລູກໝົດເທົ່ານັ້ນ, ແຕ່ວ່າລາວຊິເຮັດແນວໃດ, ໃຈນີ້ແມ່ນວ່າລາວບໍ່ໄດ້ປະການປະຕິວັດ. ລຸງສີທັນຕັດສິນໃຈອອກໄປ ເຮັດການປະຕິວັດຕໍ່ແລະລາວເອົາລູກໃຫ້ແມ່ຂອງລາວລ້ຽງ, ແມ່ລາວລ້ຽງລູກຂອງລາວໄດ້ 6ເດືອນ ສຸດທ້າຍລູກຂອງລາວກໍ່ຕາຍຈາກລາວໄປອີກ, ເຊັ່ນດຽວກັນກັບແມ່ຂອງເຂົາ ທີ່ໄດ້ຈາກລາວໄປ, ຄວາມທຸກທໍລະມານຂອງຄອບຄົວເຮັດໃຫ້ລຸງສີທັນເຂົ້າສູ່ສະໜາມຮົບຕ່າງໆໂດຍບໍ່ຢ້ານກົວຕໍ່ຄວາມຕາຍ.

ຈາກນັ້ນ ຮອດເດືອນ 9 ປີ 1960 ທ່ານໄກສອນ ສັ່ງມາອີກໃຫ້ລຸງສີທັນໄປຮຽນທະຫານບົກຢູ່ເຊີນໄຕ, ລາວຈຶ່ງໄດ້ໄປຮຽນນາຍທະຫານຢູ່ເຊີນໄຕ 2 ເດືອນກັບ 15 ວັນ. ເວລາລາວຮຽນຢູ່ເຊີນໄຕ ທ່ານໄກສອນ ໄປຢ້ຽມຢາມທະຫານຢູ່ເຊີນໄຕ ແລະ ເຂົາເອີ້ນເຕົ້າໂຮມພະນັກງານທັງໝົດທີ່ໄປຮຽນຢູ່ຫັ້ນ, ເພິ່ນລົງຈາກລົດແລະບອກວ່າ: ຈະເອົາຜູ້ວ່າການກອງຮ້ອຍ, ພໍດີລຸງສີທັນເອງຢູ່ກອງພັນ14 ວິລະຊົນ, ທ່ານໄກສອນ ໄດ້ເລືອກເອົາລຸງສີທັນໃຫ້ຂຶ້ນລົດເມືອຫັດແອບທະຫານຢູ່ຊວນທັນພຸ້ນ. ລາວຂຶ້ນລົດຮອດຊວນທັນ ກໍເຫັນທະຫານເຕັມພົບ, ເປັນບໍ່ນາຍບັນຊາ, ລຸງສີທັນຖືກສັບຊ້ອນ ເຂົ້າຮຽນນາຍທະຫານ, ພຽງແຕ່ໜຶ່ງອາທິດເທົ່ານັ້ນ ລາວກໍ່ອອກຈາກຊວນທັນກັບມາ

ລາວລົງໄປປົດປ່ອຍສະຖານທີ່ຕ່າງໆເຊັ່ນ: ກອງຮ້ອຍຂອງລາວໄດ້ເຂົ້າຕີຫຼັກ 20, ຕີເຂົ້າຄຳເກີດເວລາ 12 ໂມງກາງເວັນ. ກອງຮ້ອຍລຸງສີທັນນີ້ກວດລ້າງສັດຕູຢູ່ເມືອງຄຳເກີດສຳເລັດ, ຈາກນັ້ນລາວກໍ່ກັບເມືອຕີປົດປ່ອຍເມືອງຍົມມະລາດ, ລາວແລ່ນໃສ່ປົດນາປໍ, ຕີປົດນາປໍ, ທັງຕີຜາທ່ອນກັບເມືອງມະຫາໄຊຕາມຕົວເມືອງ, ກອງຮ້ອຍຂອງລຸງສີທັນເຮັດສຳເລັດໜ້າທີ່. ຫຼັງຈາກນັ້ນລຸງສີທັນເປັນໄຂ້ໝາກສຸກ, ລາວຈຶ່ງກັບຄືນເມືອເມືອງຄຳເກີດໃຫ້ແພດຂອງອ້າຍນ້ອງທະຫານຫວຽດນາມປິ່ນປົວຢູ່ຫັ້ນ. ຈາກນັ້ນເພິ່ນໃຫ້ລຸງສີທັນໄປຢູ່ກອງຮ້ອຍ 3 ກອງພັນ 15 ກັບຄືນໄປຕີສັດຕູຕໍ່, ລາວໄປຕີປົດປ່ອຍຜາພຸດກອງລໍ້ມີສັດຕູ 4 ກອງພັນມັນບຸກ, ລຸງສີທັນເອງກໍ່ຈັ່ງຖ້າຢູ່ຫັ້ນ, ສຸດທ້າຍສັດຕູ 4 ກອງພັນກໍ່ຖອຍ. ຮອດວັນທີ 18/2/1962 ຄຳສັ່ງຂອງຂັ້ນເທິງ ໃຫ້ລຸງສີທັນພາອ້າຍນ້ອງໄປຕີບ້ານພຸງເມືອງຫຼວງ, 4 ແຈສັດຕູປິດລ້ອມໝົດ, ສັດຕູມີເຖິງ 12 ກອງພັນນ້ອຍ, ລຸງສີທັນພຽງກອງຮ້ອຍດຽວເທົ່ານັ້ນ ເຂົ້າໄປຕີມັນຢູ່ໃນໃຈກາງ, ຝ່າຍເຮົາກັບສັດຕູຕີກັນ,ສູ້ຮົບກັນຈົນໝົດມື້ຈົນໝົດລູກປືນ. ຈາກນັ້ນລຸງສີທັນກໍ່ຍຶດເອົາລູກປືນຢູ່ໃນປົດຫັ້ນໄດ້ 27 ແກັດ, ມີທັງໝາກແຕກ, ທັງລູກປືນ, ພວກລຸງສູ້ຮົບກັບສັດຕູຕໍ່. ທະຫານສັດຕູ 12 ກອງພັນພວກລຸງສີທັນຕີຈົນຄ່ຳ, ອ້າຍນ້ອງທະຫານລຸງສີທັນຖືກເຈັບ 3 ຄົນ, ຕາມຂ່າວລັບໃຫ້ຮູ້ແມ່ນສັດຕູຕາຍຫັ້ນ 36 ບັກ, ບາດເຈັບບໍ່ນັບ ເວລານັ້ນຝ່າຍມັນກໍ່ຖອຍ, ຝ່າຍເຮົາກໍ່ຖອຍເພາະອ້າຍນ້ອງຝ່າຍເຮົາຖືກເຈັບ, ນີ້ເປັນບັ້ນຮົບເດັ່ນ, ລຸງສີທັນເອງກໍ່ຖືກເຈັບ, ສຸດທ້າຍຂາລາວກຸດຍ້ອນປົດໂຕນັ້ນແລ້ວ, ຂາລາວກຸດເມື່ອວັນທີ 25 ເດືອນ 12 ປີ 1962. ຂາລາວກຸດກ້ຳໜຶ່ງ, ລາວໄປປົວ ແລະຕໍ່ຂາຢູ່ຫວຽດນາມ, ແລ້ວລາວກໍ່ມາເຮັດວຽກຕໍ່. ແຕ່ຫຼັງຈາກຂາລາວກຸດແລ້ວ, ລາວກໍ່ບໍ່ໄດ້ອອກສະໜາມຮົບອີກ, ລາວເມືອຢູ່ແນວຫຼັງຢູ່ນຳທ່ານຄຳໄຕ ເພິ່ນແຕ່ງໃຫ້ລາວເປັນຫົວໜ້າຄຸ້ມຄອງເຮືອນ 3 ຫ້ອງ.

ມາເຖິງປີ 1967 ລຸງສີທັນໄດ້ມາຢູ່ຈັດຕັ້ງພາກ, ລາວເຮັດວຽກຈັດຕັ້ງຢູ່ພາກລາວໃຕ້ 6 ປີ ນັບແຕ່ຄຳມ່ວນລົງຮອດອັດຕະປື, ການຈັດຕັ້ງຝ່າຍທະ

ທານ. ຈາກນັ້ນລຸງສີທັນກໍໄດ້ພົບກັບເມຍຂອງລາວຜູ້ປະຈຸບັນ ຊື່ນາງອິນປົງ ຊຶ່ງເປັນຄົນຜູ້ໄທນຳກັນ, ພວກເພິ່ນພົບກັນໃນເວລາທີ່ຮຽນນຳກັນຢູ່ຊຳເໜືອ, ພວກເພິ່ນໄດ້ແຕ່ງງານກັນໃນປີ 1972, ໃນເວລານັ້ນຍົນອາເມລິກາ ກໍ່ຢຸດຍິງແລ້ວ.

ຮອດປີ 1973 ທ່ານສະໝານ ໄດ້ໃຫ້ລຸງສີທັນ ໄປເປັນພະນັກງານພະແນກການຄັງຂອງເຂດໃຕ້, ໃຫ້ລາວໄປກຳຄັງເງິນ. ເງິນທັງໝົດຢູ່ໃນຄັງ,ລາວເປັນຫົວໜ້າພະແນກ. ກ່ອນລຸງສີທັນຈະໄປເປັນຫົວໜ້າພະແນກ ກໍ່ຍ້ອນວ່າຫົວໜ້າພະແນກຜູ້ເກົ່າເປັນຄົນໂລບມາກໂລພາ, ເອົາເງິນ 400 ດອນ ໃນຄັງໄປໃຊ້ຈ່າຍຈົນໝົດ, ເມື່ອກວດພົບແລ້ວກໍ່ຖືກຈັບແລະຖືກປົດໜ້າທີ່ເລີຍ. ເອົາລຸງສີທັນເອງໄປບັນຊາໄດ້ປີໜຶ່ງ ການຈັດຕັ້ງເຂດໃຕ້ຍຸບ, ລາວຈຶ່ງໄດ້ກັບຄືນມາສະຫວັນນະເຂດ. ມາຮອດສະຫວັນນະເຂດໄລຍະທີ່ລາວເອງໄດ້ເຮັດວຽກແມ່ນໄລຍະຍຶດອຳນາດ. ກອງພັນ 15 ຍັງ 30 ຄົນ, ກອງພັນ 14 ຍັງເຫຼືອ 45 ຄົນ, ກອງພັນ 19 ຍັງໜ້ອຍທີ່ສຸດ, ເວລານັ້ນຄຳສັ່ງໃຫ້ລຸງສີທັນ, ລຸງອິນກອງນີ້ໄປປຸກລະດົມເອົາທະຫານຢູ່ເຂດນອກ, ໄດ້ທະຫານພຽງແຕ່ 85 ຄົນ, ຊິເຮັດແນວໃດ ຊິເຂົ້າຍຶດອຳນາດໄດ້? ຄຳມີເປັນຫົວໜ້າຮັບຜິດຊອບແທນກອງບັນຊາການຕາມຫຼັງ, ລາວວ່າ: ເອົາໃດ່ ຄຳມີ, ເຈົ້າຊິແກ້ແນວໃດ? ທ່ານຄຳມີຕອບວ່າ: ເຮົາຍອມແລ້ວ, ເຫັນຢູ່ຄຳສັ່ງຈາກເພິ່ນ, ແຕ່ເຮົາເຮັດບໍ່ໄດ້, ລຸງສີທັນເລີຍວ່າ: "ເອົາມາໃຫ້ເຮົາ, ເຮົາຍົກມືເຮົາເຮັດ, ເຮົາຊິເຮັດຄັນເຈົ້າມອບໃຫ້ເຮົາ, ລຸງສີທັນມີແຜນ ແລະ ວາງແຜນລະດົມທະຫານໄດ້ທັງໝົດ 2,000 ຄົນ ບັນຈຸໃຫ້ແຕ່ລະກອງພັນຄົບຊຸດໝົດ,ບາດນີ້ເຂົ້າຍຶດອຳນາດ ຈຶ່ງມີໜ້າມີຕາ, ຄັນບໍ່ມີລຸງສີທັນນີ້ ຈ້າງກໍ່ບໍ່ແລ້ວ, ຫຍຸ້ງຍາກທີ່ສຸດເວລານັ້ນ. ນີ້ຄືຄວາມຈິງກ່ຽວກັບຜົນງານລຸງສີທັນ".

ວັນທີ 13/12/1978 ທະຫານໄທເກາະຜິດ, ເກາະກວນຢູ່ຕາມດອນຕ່າງໆຢູ່ຊາຍແດນ, ມີສຽງປືນດັງສະໜັ່ນ, ເວລານັ້ນທ່ານຜູ້ບັນຊາການໄດ້

ຖາມວ່າແມ່ນໃຜຊິໄປບັນຊາ ແລະແກ້ໄຂ, ໄປບັນຊາຕີ, ຢູ່ໃນທັນບໍ່ມີຜູ້ໃດໄປ, ເພິ່ນມອບໃຫ້ລຸງສີທັນໄປບັນຊາຈຶ່ງໄດ້ຕີສຳເລັດ, ເວລານີ້ລາວກໍ່ຂາກຸດແລ້ວ.

ເດືອນ 3 ປີ 1989. ລຸງສີທັນ ໄດ້ຂໍອອກພັກຜ່ອນກິນບຳນານ, ຕຳແໜ່ງສຸດທ້າຍໃນກອງບັນຊາການ ນັ້ນເປັນທະຫານແຂວງ ແລະ ໄດ້ຊັ້ນພັນໂທ.

<u>ບ້ານນ້ຳປະເຄນວິລະຊົນ</u>:

ນັບແຕ່ປີ 1950 ກອງທະຫານຫວຽດນາມໄດ້ມາຕັ້ງໜຶ່ງກອງຮ້ອຍ ຢູ່ບ້ານນ້ຳປະເຄນ. ຫຼັງຈາກອາເມລິກາຖິ້ມລະເບີດໃສ່ຍີ່ປຸ່ນແລ້ວ ຝຣັ່ງເຂົ້າມາປົດອາວຸດຂອງຍີ່ປຸ່ນ ແລະຍີ່ປຸ່ນກໍ່ຍອມ, ຍີ່ປຸ່ນກັບຄືນເມືອປະເທດ. ທະຫານຝຣັ່ງກໍ່ກັບຄືນມາໃນປີ 1946, ມັນມາຮອດບ້ານລຸງສີທັນ ເດືອນ 9 ປີ 1946, ເວລານັ້ນເກີດຂະບວນພວກປຸ້ນ, ຫຼາຍພວກປຸ້ນຈູດບ້ານ, ປຸ້ນເອົາຊັບຂອງປະຊາຊົນ. ນັກປຸ້ນທີ່ມີຊື່ເວລານັ້ນແມ່ນບັກໂນນຢູ່ມະຫາໄຊ, ມັນຕະເວນໄປປຸ້ນບ້ານນີ້ບ້ານນັ້ນຢູ່ຕາມເມືອງຕ່າງໆຂອງແຂວງສະຫວັນນະເຂດ, ມີເທື່ອໜຶ່ງມັນໄດ້ມາແຕ່ເມືອງມະຫາໄຊ ມາປຸ້ນເອົາຊັບຢູ່ເມືອງບົວລະພາ, ມັນລົງມາຫ້ວຍທົງກົງວນາຫານຳປະເຄນຍຶດເອົາງົວປະຊາຊົນ 26-27 ໂຕ, ເອົາເມືອເມືອງມະຫາໄຊເປັນຂອງມັນ. ເມື່ອເປັນຈັ່ງຊັ້ນ, ພໍ່ຂອງລຸງສີທັນຊື່ວ່າ ຍີງ ຈຶ່ງໄດ້ເຕົ້າໂຮມພີ່ນ້ອງຢູ່ໃນບ້ານ 6 ຄົນ ຊຶ່ງເປັນພີ່ນ້ອງຊັ້ນຈຳເພື່ອປາບພວກປຸ້ນນີ້. ພາກັນລັດສະກັດມັນ, ເວລານັ້ນພວກເຂົາເອົາປືນຍິງ, ພວກປຸ້ນຖືກເຈັບ, ມັນປະງົວໝົດ. ພໍ່ລຸງສີທັນ ແລະພີ່ນ້ອງເຂົາໄດ້ເອົາງົວມາສົ່ງຄືນໃຫ້ປະຊາຊົນ. ຫຼັງຈາກນັ້ນກໍ່ເຫັນເພື່ອນຫວຽດນາມລົງມາຢູ່ນຳພໍ່ຂອງລຸງສີທັນແຕ່ບໍ່ຫຼາຍ, ຈົນເຖິງ 1950 ເພິ່ນຈຶ່ງເອົາທະຫານຫວຽດນາມລົງມາເປັນກອງຮ້ອຍ, ແລ້ວປະຈຳຢູ່ໃນບ້ານລຸງສີທັນ, ເຄື່ອນໄຫວຢູ່ຫ້ວຍຈະໂລະນີ້. ຫຼັງຈາກນັ້ນ ປີ 1954 ພວກເພື່ອນຫວຽດຈຶ່ງມາຢູ່ນຳລຸງສີທັນເລີຍ. ບ້ານຢູ່ແມ່ນນ້ຳປະເຄນທັ້ນ, ສັດຕູເຂົ້າບໍ່ໄດ້ເພາະປະຊາຊົນໝົດບ້ານກໍ່ຈັດເປັນກຳລັງໝົດ. ທະຫານຢູ່ເປັນກອງຮ້ອຍຢູ່ໃນບ້ານ ແຕ່ບໍ່ມີໃຜຮູ້ເພາະປະຊາຊົນໝົດບ້ານເຮັດຄືວ່າບໍ່ມີຫຍັງເກີດ

ຂຶ້ນມາໃນບ້ານ, ພວກເຂົາດຳລົງຊີວິດຕາມປົກກະຕິໄປໄຮ່ໄປນາຕາມເຄີຍ. ຈາກນັ້ນບ້ານນ້ຳປະເຄນ ແມ່ນມີສຽງປືນ, ສາງເຂົ້າ, ສາງເຄື່ອງທີ່ຂົນມາ ຈາກຫວຽດນາມມາປະຢູ່ບ້ານນ້ຳປະເຄນເປັນບ່ອນພັກເຊົາ, ເປັນບ່ອນສຶກສາອົບຮົມການເມືອງການທະຫານຈົນຮອດມື້ປົດປ່ອຍປີ 1975. ທະຫານນັບທັງຫວຽດນາມທັງລາວກິນເຂົ້າ, ກິນອາຫານ ແລະກິນອັນນີ້ຢູ່ທັ້ນນັບທັງໝູ, ໄກ່, ງົວ, ຄວາຍແມ່ນປະຊາຊົນເອົາໃຫ້ໂລດ, ພວກເຂົາເຂົ້າມາພັກເປັນກອງພັນ ກໍ່ຍັງມີ. ບານນ້ຳປະເຄນເປັນບ້ານນ້ອຍມີພຽງ 47 ຫຼັງຄາເຮືອນເທົ່ານັ້ນ ແຕ່ກໍເປັນສະຖານທີ່ໃຫ້ທະຫານເຮົາໄດ້ເຄື່ອນມາຢູ່, ໝາຍຄວາມວ່າໝົດພາກໃຕ້ມີເສັ້ນທາງດຽວຄືເສັ້ນທາງເລກ 9 ທີ່ສາມາດໄປຫາຫວຽດນາມໄດ້, ລູກປືນແລະສະບຽງອາຫານກໍ່ຂົນມາທາງຫວຽດນາມມາປະຢູ່ບ້ານນ້ຳປະເຄນທັ້ນ. ເມື່ອເປັນຈັ່ງຊັ້ນ; ທ່ານໄກສອນ ຈຶ່ງໃຫ້ບ້ານນ້ຳປະເຄນເປັນບ້ານວິລະຊົນ, ລູກຫຼານໄປເປັນພະນັກງານ, ເປັນທະຫານແມ່ນ 70 ກວ່າຄົນທັງຍິງແລະຊາຍ, ບ້ານນ້ອຍແຕ່ອອກໄປເຮັດການປະຕິວັດຈົນໝົດ.

ຜູ້ທີ່ເຄື່ອນໄຫວເດັ່ນ ແລະ ໄດ້ຮັບນາມມະຍົດເປັນນັກຮົບແຂ່ງຂັນຢູ່ໃນບ້ານນ້ຳປະເຄນມີ 2 ຄົນ ຄື: ລຸງອິນກອງກັບລຸງສີທັນ. ແຕ່ເວົ້າລວມແລ້ວບ້ານນ້ຳປະເຄນທຸກຄົນຄືນັກຮົບທັງໝົດ, ຜູ້ຍິງກໍ່ຕີເສິກໄດ້ ດັ່ງນັ້ນ ເພິ່ນຈຶ່ງໃຫ້ເປັນບ້ານວິລະຊົນ.

ໃນການຕໍ່ສູ້ລຸງສີທັນຮູ້ສຶກສ່າ ບ່ອນທີ່ຫຍຸ້ງຍາກແລະດຸເດືອດກວ່າໝູ່ແມ່ນເວລາທີ່ຢູ່ພູຕາດໜາ ໃນປີ 1961-ປີ 1962; ສັດຕູອ້ອມໝົດ, 7 ມື້ລາວບໍ່ໄດ້ກິນເຂົ້າ, ບັນຊາກອງຮ້ອຍ, ລາວສັ່ງໃຫ້ເອື້ອຍລ້ຽງຕົ້ມເຂົ້າປຸກໃຫ້ອ້າຍນ້ອງກິນແຕ່ລາວເອງກິນບໍ່ໄດ້, ເວລານັ້ນ ລາວວ່າຈັກຊິເຮັດແນວໃດຫາທາງອອກຈາກວົງປິດລ້ອມຂອງສັດຕູ. ສຸດທ້າຍບໍ່ມີຫຍັງກິນ ພວກລຸງສີທັນເອົາແຕ່ຢວກກ້ວຍມາສູ່ກັນກິນ. ເວລານັ້ນພວກເພິ່ນບໍ່ທັນໄດ້ຈັດຕັ້ງກອງຫຼອນ, ດັ່ງນັ້ນຈຶ່ງບໍ່ມີຜູ້ມາຊ່ວຍ ແລະ ສົ່ງເຂົ້າໃຫ້ກິນ. ເມື່ອມີສະພາບແບບນັ້ນແລ້ວ ລຸງສີທັນກໍ່ໂທລະເລກໄປຮ້ອງກອງພັນຢູ່ທາງຄຳເກີດພຸ້ນ ເພື່ອໃຫ້ມາຊ່ວຍພວກລຸງ

ສີທັນ, ຈາກນັ້ນເພິ່ນໄດ້ເອົາທະຫານໜຶ່ງກອງຮ້ອຍມາຊ່ວຍພວກລຸງສີທັນຈຶ່ງສາມາດຕີສັດຕູແຕກ ແລະ ປົດປ່ອຍ 8 ບ້ານຕື່ມອີກ.

ລຸງສີທັນຄິດວ່າການທີ່ອອກໄປເຮັດການປະຕິວັດນັ້ນແມ່ນເພື່ອອຸດທິດໃຫ້ປະເທດຊາດທັງໝົດຈົນກະທັ້ງຕົນເອງ. ລາວເວົ້າວ່າ: "ເລື່ອງເສິກບໍ່ແມ່ນເວົ້າຖ້າມີບ່ອນໃດຊະນະກໍ່ມີຜູ້ຂ້າ, ຖ້າມີຜູ້ຂ້າຢູ່ບ່ອນໃດແມ່ນບ່ອນນັ້ນກໍ່ຊະນະ. ຍ້ອນຄວາມຄຽດແຄ້ນ, ເປັນຫຍັງຈຶ່ງຄຽດແຄ້ນ. ແຕ່ຍັງນ້ອຍຕົນເອງທຸກຍ້ອນພໍ່ໄປເຮັດການໃຫ້ຝຣັ່ງ, ເວລາອາຍຸໄດ້ 10 ປີ, ເພິ່ນເຫັນພໍ່ມີແຕ່ໄປເຮັດທາງໃຫ້ຝຣັ່ງ".

ຫຼັງຈາກແຕ່ງງານກັບເມຍຜູ້ທີ່ 2, ລຸງສີທັນ ແລະ ເມຍກໍ່ມີລູກຮ່ວມກັນ 6 ຄົນ ເປັນຊາຍ 4 ຄົນ ແລະ ຜູ້ຍິງ 2 ຄົນ. ລູກຜູ້ໜຶ່ງ ກໍ່ຍັງຮຽນບໍ່ທັນຈົບ, ລູກລາວຜູ້ໜຶ່ງໄປຮຽນວັດທະນະທຳຢູ່ໂຮງຮຽນນາຍສິບ, ຫຼັງຈາກນັ້ນກໍ່ຮຽນຕໍ່ນາຍສິບເລີຍຢູ່ພູບາຈຽງ. ຮຽນຈົບນາຍສິບແລ້ວມາລໍຖ້າຢູ່ກອງພັນນ້ອຍ ກອງທີ່ 4 ກອງລົດຕັ້ງລໍຖ້າວ່າຊິໃຫ້ເພິ່ນໄປຮຽນ. ເພິ່ນຢູ່ໄດ້ 3 ປີ ລຸງສີທັນໄດ້ຍິນວ່າ ເພິ່ນຊິສົ່ງລູກລາວໄປຕີ ກັບແມ້ວຢູ່ທາງເໜືອພຸ້ນ, ລາວໄດ້ຍິນແນວນັ້ນລາວກໍ່ໄປຮອບເອົາລູກມາເປັນນັກຮົບແປດໆ, ລຸງສີທັນຢ້ານວ່າບາດໄປສູ້ຮົບຂາກຸດ ຕາບອດ ຄືພໍ່ມັນແມ່ນໃຜຊິເບິ່ງ, ຂັ້ນເທິງເພິ່ນຊິເບິ່ງບໍ ? ລາວເລີຍພາລູກມາ. ລູກລາວຜູ້ທີ່ 2 ນັ້ນຮຽນກໍ່ຮຽນຢູ່ໂຮງຮຽນນາຍສິບ. ລູກລາວຜູ້ທີ່ 3 ຮຽນຄົມມະນາຄົມຂົວທາງ, ລູກລາວຜູ້ທີ່ 4 ຮຽນຊິຈົບປີນີ້ແລ້ວ, ຈັກລາວຊິໃຫ້ມັນໄປຮຽນຫຍັງ, ລາວເອງກໍ່ບໍ່ມີເງິນສິ່ງເສີມໃຫ້ລູກຮຽນ; ລຸງສີທັນຄິດວ່າໃຫ້ລູກໄປຮຽນບ່ອນໃດທີ່ບໍ່ໄດ້ຈ້າງແມ່ນໃຫ້ຮຽນຢູ່ຫັ້ນ. ລູກລາວຜູ້ຮຽນຄົມມະນາຄົມນັ້ນ ມັນຮຽນຈົບແຕ່ຂັ້ນກາງ ມັນກໍ່ຢາກຮຽນຕໍ່ຂັ້ນສູງຢູ່ວຽງຈັນ ແຕ່ກໍ່ຕ້ອງມີເງິນຈຶ່ງໄດ້ໄປຮຽນ, ລາວບໍ່ມີເງິນ, ລາວເປັນພະນັກງານບຳນານ, ລາວບຳນານແຂງແຮງກໍ່ຍັງໄຄແດ່, ລາວບຳນານຂາກຸດ, ຂາລາວກຸດແຕ່ປີ 1962 ພຸ້ນລະ. ລາວວ່າ: "ບຳນານຄືໝູ່ຍັງມີສຸຂະພາບເຂັ້ມແຂງຍັງແຄນ. ສະເພາະເພິ່ນແລ້ວ

ເຮັດນາກໍ່ບໍ່ໄດ້, ອອກໄປເຮັດນຳເຂົາມີແຕ່ເມຍນີ້ແລ້ວພາລູກເຮັດນາ, ເພາະເຖິງຍາມນາມາລູກໆເຂົາກໍ່ພັກ ດັ່ງນັ້ນ ຈຶ່ງມາຊ່ວຍແມ່ຂອງເຂົາເຮັດນາໄດ້".

ນ້ຳໃຈຮັກຊາດຂອງລຸງສີທັນແມ່ນສູງສົ່ງ, ສັດຊື່, ບໍ່ກິນຂອງພັກຂອງລັດ, ເວລາທີ່ລາວຍັງເຮັດວຽກເປັນພະນັກງານຢູ່ລາວເປັນຜູ້ຮັບຜິດຊອບເງິນລວມຂອງລັດເປັນຄົນລິດ ແຕ່ລາວກໍ່ບໍ່ໄດ້ເອົາຈັກກີບ. ທ່ານສະໜານປະທານສະພາເວົ້າວ່າ: "ບໍ່ມີໃຜຄືເຈົ້າ, ເອົາຜູ້ນີ້ແລ້ວມາເປັນຫົວໜ້າການຄັງ". ຕະຫຼອດຊີວິດເຮັດການປະຕິວັດ ລຸງສີທັນບໍ່ໄດ້ເອົາຂອງພັກຂອງລັດ, ອັນໃດທີ່ພັກລັດໃຫ້ລາວກໍເອົາ. ເພາະລາວຊາບຊຶ້ງແນວຄິດຂອງລຸງໄກສອນ ໃນເວລາທີ່ລາວຟັງເພິ່ນບັນລະຍາຍການເມືອງລາວໄດ້ຍິນເພິ່ນເຄີຍເວົ້າວ່າ ຕັ້ງແຕ່ເຂັມຫັກເຫຼັ້ມໜຶ່ງກໍ່ໃຫ້ສົ່ງຖ້າແມ່ນຂອງສ່ວນລວມ. ໃຜກໍ່ວ່າລຸງສີທັນເປັນຄົນໂງ່, ເປັນເຖິງຂັ້ນນັ້ນກໍ່ຍັງໂງ່. ລາວວ່າ: "ໂງ່ກໍ່ຢ່າ, ເຮົາບໍ່ໄດ້ກິນຂອງປະເທດຊາດ, ເຮົາໄດ້ອຸດທິດເຫື່ອແຮງຂອງຕົນໃຫ້ແກ່ປະເທດຊາດແມ່ນເຮົາພູມໃຈແລ້ວ".

ຫຼັງຈາກລຸງສີທັນ ໄດ້ອອກກິນເບ້ຍບໍານານ ຈົນເຖິງທຸກວັນນີ້, ລາວໄດ້ຮຽນເລື່ອງຢາພື້ນເມືອງ ແລະ ລາວຫາກິນໂດຍຂາຍຢາພື້ນເມືອງເພື່ອລ້ຽງຄອບຄົວລາວ, ທຸກຄົນທີ່ເຈັບເປັນຢູ່ແຂວງນີ້ ກໍ່ມາບູຊາຢານຳລາວ, ລາວຈຶ່ງໄດ້ເງິນລ້ຽງລູກລ້ຽງເຕົ້າຂອງລາວຈົນຮອດປະຈຸບັນນີ້, ຖ້າບໍ່ມີຢານີ້ລາວຕາຍແລ້ວ.

ຜ່ານຂະບວນການຕໍ່ສູ້ເພື່ອປົດປ່ອຍຊາດ ລຸງສີທັນກໍ່ໄດ້ປະກອບສ່ວນຢ່າງສົມກຽດໃຫ້ແກ່ປະເທດຊາດ ແລະ ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍແລ້ວ, ພັກລັດກໍ່ບໍ່ລືມລາວແລະໄດ້ມີການສັນລະເສີນບຸນຄຸນຂອງລາວດ້ວຍການຍ້ອງຍໍ, ມອບຫຼຽນໄຊ, ຫຼຽນກາຕ່າງໆຈຳນວນໜຶ່ງ ເພື່ອຈາລຶກບຸນຄຸນຂອງລາວ.

ໃນເວລາທີ່ເຄື່ອນໄຫວການປະຕິວັດ ແລະຢູ່ສະໜາມຮົບນັ້ນລຸງສີທັນເປັນຄົນມັກມ່ວນຊື່ນ. ເພງທີ່ລາວມັກຮ້ອງນັ້ນແມ່ນເພງປະຕິວັດ ແລະ ຫຼິ້ນສີຊໍ. ໃນປະຈຸບັນ, ລຸງສີທັນຮ້ອງເພງໃນສະໄໝເຄື່ອນໄຫວການປະຕິວັດເພື່ອ

24/ຂ່າວ ທັ້ງໝົດຂ່າວ

ທວນຄືນ ແລະ ສຳນຶກເຖິງຊີວິດການເຄື່ອນໄຫວການປະຕິວັດຂອງຕົນໃນໄລຍະສົງຄາມ. ພາບຕ່າງໆນາໆເຫຼົ່ານັ້ນ, ມັນຄືວ່າຫາກໍ່ເກີດຂຶ້ນກັບລາວນີ້ລະ.

ນັບຕັ້ງແຕ່ລຸງສີທັນເອງເລີ່ມເຄື່ອນໄຫວການປະຕິວັດຈົນຮອດທຸກມື້ນີ້, ລາວເອງຍາມໃດກໍ່ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກຕະຫຼອດ ແລະ ເຮັດວຽກໃຫ້ການປະຕິວັດຈົນສຸດກຳລັງສຸດປາຍ ເຖິງວ່າຂາລາວຈະກຸດ ແຕ່ຍັງສູ້ຈົນຮອດມື້ລາວກິນເບັ້ຍບຳນານ. ນັບແຕ່ມື້ລາວເຮັດການປະຕິວັດຈົນເຖິງມື້ລາວອອກກິນເບັ້ຍບຳນານ ລາວເຄີຍໄດ້ໃບຍ້ອງຍໍແຕ່ຂັ້ນສູນກາງຈົນຮອດຂັ້ນແຂວງ ລາວຖືວ່າຕົນເອງໄດ້ເຮັດໜ້າທີ່ ທີ່ປະເທດຊາດຮຽກຮ້ອງຕ້ອງການແລ້ວ. ລຸງສີທັນເວົ້າວ່າ: "ສ່ວນປະເທດຊາດຈະຈົບງາມ, ຈະມີຄວາມສະຫງົບສຸກ ແລະຈະຮັ່ງມີເຂັ້ມແຂງຄືປະເທດອື່ນໆໃນໂລກນັ້ນ ແມ່ນມອບໃຫ້ລູກຫຼານເປັນຜູ້ສືບທອດລ້າງສາຕໍ່ໄປ ເພື່ອຈະພັດທະນາພາປະເທດຊາດກ້າວສູ່ຄວາມສີວິໄລຮຸ່ງເຮືອງ ສົມກັບຄວາມປາດຖະໜາຂອງຄົນລຸ້ນກ່ອນທີ່ປົກປັກຮັກສາແຜ່ນດິນໄວ້ໄດ້ຈົນເທົ່າທຸກມື້ນີ້".

ລຸງສຸບິນ ແກ້ວຍອດສິງ

ເຜົ່າຕະລ່ຽງ

(ແຂວງ ເຊກອງ)

ລຸງສຸບິນນີ້ ເວົ້າທຸກກໍ່ທຸກທັ້ນແລ້ວ. ເວົ້າລວມແລ້ວ ແຕ່ເພິ່ນອາຍຸ 5 ປີ ພໍ່ເພິ່ນເປັນເຈັບ, ແຕ່ເພິ່ນອາຍຸ 13 ປີ ເພິ່ນເປັນຜູ້ຍິງ, ເປັນຫຍັງຈຶ່ງວ່າເປັນຜູ້ຍິງ, ຍ້ອນວ່າຕັກນ້ຳກໍ່ເພິ່ນຕຳເຂົ້າກໍ່ເພິ່ນ, ຂອງມັນບໍ່ມີຜູ້ຍິງເດ, ມີແຕ່ສອງຄົນເພິ່ນກັບນ້ອງ. ຕັກນ້ຳຕຳເຂົ້າ,ເຮັດໄຮ່. ຕອນອາຍຸເຮົາ 3-4 ປີ ພໍ່ເພິ່ນກໍ່ເຈັບຄືເພິ່ນເຈັບແນວນີ້ແຫລະ, ຫາກບໍ່ແມ່ນເຈັບໄຂຄືເພິ່ນ, ພໍເພິ່ນເຈັບແນວອື່ນ, ແນວນັ້ນໜາ. ແຕ່ຄວາມທຸກນີ້ເພິ່ນທຸກ, ແມ່ລຸງສຸບິນຕາຍພໍດີເພິ່ນທັ້ນຕັກນ້ຳເປັນໜາ, ນ້ອງເພິ່ນຍັງບໍ່ທັນເປັນຊ້ຳໜາຕັກນ້ຳ, ມີແຕ່ເພິ່ນຕັກນ້ຳນ້ອງພໍແຕ່ຍ່າງໄດ້. ເວລາເພິ່ນຕັກນ້ຳນັ້ນເຄີຍເອົານ້ຳເຕົ້າຕັກ. ຕອນນັ້ນແລ້ວແມ່ເພິ່ນຕາຍ. ພໍ່ລາວທັ້ນມີເມຍ 4 ຄົນ. ເມຍທີ່ໜຶ່ງຕາຍ, ເມຍທີ່ສອງລາວເອົາ ແລະ ຕາຍອີກ, ເມຍທີ່ສາມລາວເອົາ ແລະ ຕາຍອີກ, ພໍ່ເພິ່ນເອົາເມຍທີ່ສີ່ ລຸງສຸບິນແມ່ນອອກໄປເປັນທະຫານແລ້ວ, ລຸງສຸບິນບໍ່ຮູ້. ຕອນອາຍຸ 14 ປີ ລຸງສຸບິນກໍຍັງເຮັດໄດ້, ພໍ່ແມ່ເພິ່ນກໍຍັງລ້ຽງເພິ່ນໄດ້, ເພິ່ນຍັງລ້ຽງພໍ່ແມ່ໄດ້, ເຮັດໄຮ່ເຮັດສວນນຳພໍ່ແມ່, ເວລານັ້ນເພິ່ນບັກໄຮ່ຖາງໄຮ່ຊ່ວຍພໍ່ຊ່ວຍແມ່ຈົນເພິ່ນອາຍຸ 15 ປີ. ພໍແຕ່ເພິ່ນຍ່າງໄດ້ກໍເອົານ້ຳເຕົ້າອັນດຽວເຈາະໃສ່ກະພາແນວນັ້ນນ່າ. ແມ່ເພິ່ນຕາຍ, ມີແຕ່ເພິ່ນສອງຄົນກັບນ້ອງ, ພໍ່ຢູ່ເຮືອນ, ພວກເພິ່ນເຮັດເອງກິນເອງ.

ທຸກທັ້ນແລ້ວພໍ່ແມ່ເປັນຜູ້ລ້ຽງເພິ່ນ. ອາວສອງຄົນອອກຢູ່ນຳລຸງ, ຢູ່ນຳປ້າ, ມັນບໍ່ຖືກກັບພໍ່ຂອງລຸງສຸບິນທັ້ນໜາ. ອາວສອງຄົນນັ້ນອອກຈາກເຮືອນໄປຢູ່ນຳປ້າເພິ່ນ, ຢູ່ນຳເອື້ອຍເພິ່ນ, ສຸດທ້າຍສອງອ້າຍນ້ອງເພິ່ນລ້ຽງພໍ່ລ້ຽງແມ່. ເວລານັ້ນລຸງສຸບິນມີອາຍຸໄດ້ 15 ປີ, ຖາງໄຮ່ຖາງສວນຊ່ວຍພໍ່ເພິ່ນກໍ່ໄດ້ແລ້ວ.

ຄັນຊິເວົ້າແລ້ວເຂົ້າກິນອຶດກໍ່ຄືບໍ່ອຶດ, ເພາະວ່າຄອບຄົວພວກເພິ່ນຄົນບໍ່ຫຼາຍ, 3 ຄົນກິນຊິວ່າພໍກໍ່ບໍ່ພໍ, ພໍຮອດແຕ່ເຂົ້າໃໝ່. ມີແຕ່ສອງຄົນພວກເພິ່ນກິນເຢາະກິນຢອມ, ກິນນຳໝູ່ເພິ່ນແດ່, ຂໍນຳພີ່ນ້ອງເພິ່ນກໍ່ໃຫ້ຈັ່ງຊັ້ນໝາ. ເວລາແມ່ເພິ່ນຕາຍ, ປະມານ 10 ປີ ປາຍພໍ່ເພິ່ນຕາຍ ປີ 1962, ເພິ່ນຢູ່ພາກເໜືອແລ້ວ, ເພິ່ນເປັນທະຫານແລ້ວ.

ເວລານັ້ນເຮືອນລຸງສຸບິນ, ຍັງດັ້ງເດີມຢູ່ບໍ່ທັນເພເຖິງຂັ້ນເປັນຕູບດອກ, ສ່ຳເຮືອນທຳມະດາເຮົານີ້ແຫລະ. ເຮືອນແບບເຜົ່າຕະລຽງຫັ້ນແຫລະ. ນອກນັ້ນລຸງສຸບິນກໍ່ຍັງເກືອໝູ, ເກືອເປັດເກືອໄກ່, ລ້ຽງງົວລ້ຽງຄວາຍໃນຄອບຄົວ. ງົວຄວາຍເພິ່ນກໍ່ມີຢູ່ແຕ່ກ່ອນຫັ້ນ, ແຕ່ວ່າໄດ້ມາ 10 ວັນ 20 ວັນມັນກໍ່ຕົກເຫວຕາຍ, ເພິ່ນວ່າເປັນຄົນບໍ່ມີບຸນ, ຄາດມັນບໍ່ຮັ່ງບໍ່ມີນຳໝູ່. ນອກຈາກເຮັດວຽກຊ່ວຍພໍ່ຊ່ວຍແມ່ລ້ຽງນ້ອງລ້ຽງນຸ່ງແລ້ວ, ການຫາຢູ່ຫາກິນຂອງເພິ່ນກໍ່ບໍ່ມັກເຮັດກະທິບກະຕ່ຳ, ມີແຕ່ຕຶກແຫແຊ່ມອງຫັ້ນແລ້ວ. ແຕ່ເພິ່ນອາຍຸ 7-8 ຫັ້ນມັນຕຶກແຫນີ້, ເລື່ອງກະດິດກະຕ່ຳຫັ້ນເພິ່ນບໍ່ໄດ້ເຮັດ. ຄູ່ມື້ນີ້ເພິ່ນບໍ່ຕິດໃດເຮັດກະດິດກະຕ່ຳ, ເພິ່ນຕິດແຕ່ເລື່ອງແຫເລື່ອງມອງ. ມອງກໍ່ແມ່ນປຽດຫັ້ນແລ້ວເຮັດ, ບໍ່ແມ່ນຢາງຄືດຽວນີ້ດອກ, ສານຕ່ຳງກັນ, ພໍໄດ້ກິນແຕ່ກ່ອນມັນບໍ່ອຶດເດ. ເພິ່ນມັກຢູ່ຍິງນົກ, ຍິງຢູ່, ຍິງໜ້າເພິ່ນຕິດແທ້, ນັບແຕ່ເດືອນສາມໄປແລະເພິ່ນໄປຝຶກແລ້ວ,ເພິ່ນເຮັດຊຸມຍິງນົກ.

ບາດນີ້ ຕໍ່ໝູ່ຕໍ່ຄູ່ນີ້ເພິ່ນບໍ່ເຄີຍຕີໝູ່ຕີຄູ່ຈັກເທື່ອ, ຂອງວ່າຮັກຄົນທຸກ, ລຸງສຸບິນຢາກເປົ່າແຄນເປົ່າປີ່ສີຊໍກໍ່ບໍ່ຫານ, ແນວວ່າເພິ່ນເປັນຄົນທຸກຄົນຍາກ, ເພິ່ນບໍ່ຫານຈັບຫານບາຍຂອງໝູ່, ຢູ່ແນວນັ້ນແລະຟັງແຕ່ໝູ່.ເພິ່ນບໍ່ເຄີຍຕີໝູ່, ບໍ່ເຄີຍອາລະວາດຕີຜູ້ນັ້ນຕີຜູ້ນີ້, ບໍ່ເຄີຍເຮັດດອກ. ແຕ່ວ່າພີ່ນ້ອງເພິ່ນກໍ່ມາຢູ່. ເພິ່ນບໍ່ເຮັດໃຫ້ໝູ່ຂອງຄົນທຸກຄົນຍາກ, ເພິ່ນຢ້ານມັນບໍ່ແພ້ໝູ່ເດເຈົ້າຊິເຮັດແນວໃດໝົດທໍ່ນັ້ນແລະ, ດີບໍ່ດີໝູ່ຊິຂ້າຖິ້ມຊ້ຳ, ຂອງເພິ່ນເປັນຄົນທຸກບໍ່ແມ່ນຄົນຮັ່ງຄົນມີ.

ຕໍ່ຜູ້ເຖົ້າຜູ້ແກ່ ໂອຍ! ອັນນັ້ນເພິ່ນພັດດີ, ຮູ້ເຄົາຮີບຢຳເກງ. ເພິ່ນເຄີຍຢູ່ນຳພໍ່ເຖົ້າ, ມັກຟັງເລື່ອງນິທານ, ຈົນຮອດມື້ເພິ່ນເປັນທະຫານຊູມື້ນີ້, ປະຊາຊົນຈິນເວົ້າເພິ່ນເຈົ້ານີ້ບໍ່ຄືຜູ້ບ່າວເຂົາວ່າ, ໄປບ້ານໃດກໍ່ລົມນຳພໍ່ເຖົ້າແມ່ເຖົ້າ, ມັນເລື່ອງຄົນເຖົ້າ, ຜູ້ເຖົ້າມັນເວົ້າແນວນີ້ແນວນັ້ນ, ພວກຜູ້ເຖົ້າໄດ້ບອກສອນແນວນີ້ແນວນັ້ນແລະຟັງພວກຜູ້ເຖົ້າ, ອັນໃດດີອັນໃດຮ້າຍ.

ຜູ້ເຖົ້າຫັ້ນຈຸດໜັກແມ່ນເລົ່າບັນຫາເລື່ອງເຮັດໄຮ່ເຮັດສວນ, ເຮັດວິທີໃດປ່ວແປງການກິນການຢູ່ໃຫ້ມັນດີຂຶ້ນຫັ້ນໜາ. ຄົນເຖົ້າຄົນແກ່ເພິ່ນມັກເວົ້າເລື່ອງເຮັດໄຮ່ເຮັດນາ, ລຸງສຸບິນເປັນຄົນທຸກເວົ້າເລື່ອງລ້ຽງງົວລ້ຽງຄວາຍລ້ຽງໝູ, ຄົນທຸກນີ້ລ້ຽງໄກ່ພໍກິນພໍຢູ່, ບໍ່ໃຫ້ລ້ຽງອັນອື່ນ, ລ້ຽງອັນອື່ນບໍ່ໄດ້, ມີແຕ່ລ້ຽງໄຕນັ້ນແລ້ວ. ຄູ່ມື້ນີ້ໜາລຸງສຸບິນມັນຍັງຕິດໃຈນຳການລ້ຽງໄກ່ໜາ, ຄັນເວົ້າເລື່ອງລ້ຽງໄກ່ເພິ່ນພໍມີພໍໄດ້. ນັບແຕ່ລຸງສຸບິນເປັນຄົນມານີ້ ສອງສາມປີໃດເພິ່ນລ້ຽງເປັດລ້ຽງໄກ່ເປັນຮ້ອຍ, ໝູນີ້ ເພິ່ນບໍ່ລ້ຽງ ຂອງເພິ່ນບໍ່ມີອັນເກືອ.

ບາດນີ້ລຸງສຸບິນແຕ່ໄວເດັກ 10-15 ປີ ເພິ່ນຮູ້ມ່ວນຊື່ນນຳໝູ່ເອີແນວນັ້ນມັນມັກດອກ, ຈຸດໜັກເພິ່ນມັກການຈັດຕັ້ງ, ເວລາມັນມີບຸນມີສິນຫັ້ນ, ເຂົາຈັດຕັ້ງໃຫ້ຜູ້ນັ້ນຜູ້ນີ້ຟ້ອນຫຼືວ່າແນວນັ້ນ ເພິ່ນມັກ, ເລື່ອງບຸນເລື່ອງສິນນີ້ເພິ່ນມັກຢູ່ດອກ.

ແຕ່ເພິ່ນອາຍຸ 14-15 ປີ ຫຼື ຫຼຸດຫັ້ນພໍ່ແມ່ເພິ່ນບໍ່ໄດ້ບັງຄັບໃຫ້ເພິ່ນເອົາເມຍແຕ່ຍັງນ້ອຍໆ, ພໍ່ແມ່ເພິ່ນບໍ່ໄດ້ບັງຄັບ, ພວກເພິ່ນຄົນທຸກຄົນຍາກພໍ່ແມ່ເພິ່ນບໍ່ບັງຄັບ. ແຕ່ໃດມາພໍ່ແມ່ເພິ່ນບໍ່ເຄີຍບັງຄັບກັນ, ມີແຕ່ເຂົາມັກກັນແລະຊອກຫາເອງ. ແຕ່ເພິ່ນອາຍຸ 14-15 ປີ ຫັ້ນເພິ່ນກໍ່ໄດ້ລົມຢູ່ຜູ້ສາວຫັ້ນ, ຫາກເພິ່ນລົມເລື່ອງລົມຫຼິ້ນລົມຍອກຊື່ໆ, ລົມຊິເອົາຈິງເອົາຈັງເອົາແທ້ເອົາວ່ານີ້ບໍ່, ລົມພໍມັນມ່ວນຊື່ນລະຫວ່າງຜູ້ສາວຜູ້ບ່າວຫັ້ນນ່າ. ເວລາໄປປ່າໄປດົງໄປເກັບໝາກໄມ້ໝາກຕອກກັບແມ່ຍິງຫັ້ນເພິ່ນກໍ່ເຄີຍໄປດອກ. ເລື່ອງນີ້ສຳລັບເພິ່ນເວົ້າຄວາມຊື່ຢູ່ໃສກໍ່ບໍ່ມີໃຜຕິເພິ່ນດອກ, ເຫັນບໍ່ເວລາເພິ່ນຢູ່ຫວຽດນາມແຕ່ກ່ອນ, ປີ 1960, ຢຸດຣົບ, ໝູ່ເພິ່ນວ່າພີສັງເຈົ້າໄປຕະຫຼາດຜູ້ຍິງກໍ່ໄປນຳ, ຖືເຄື່ອງຖືຂອງ!

ເພິ່ນວ່າໂຢະ! "ເຮົາເຮັດດີກໍ່ດີ". ບໍ່ແມ່ນຊິຄືໝູ່, ບາດໝູ່ໂລດມັກຫຼິ້ນມັກກິນ, ບາດເພິ່ນພັດບໍ່ແມ່ນແນວນັ້ນ, ຮັກກໍ່ແມ່ນຮັກແທ້, ໝູ່ກໍ່ບໍ່ແມ່ນໝູ່ແທ້, ຜູ້ສາວຜູ້ບ່າວກໍ່ຄືເວົ້າຫັ້ນແຫລະ, ຢູ່ບ້ານກໍ່ຄືກັນ, ຜູ້ແສ້ຜູ້ສາວເຂົາກໍ່ມາຊວນເພິ່ນ, ເພິ່ນກໍ່ໄປນໍາເຂົາ, ເພິ່ນບໍ່ໄດ້ເຮັດອີ່ສັງ, ເພິ່ນເປັນຄົນສັດຊື່ບໍລິສຸດ, ເພິ່ນຄິດວ່າລູກເຮົາກໍ່ຄືລູກໝູ່, ຊິແນວນັ້ນບໍ່ໄດ້, ຜິດທໍານຽມກັນກໍ່ມີ, ກົດໝາຍກໍ່ມີ, ກົດໝາຍບໍ່ແມ່ນຊິມີແຕ່ດຽວນີ້ໃດ, ມັນມີແຕ່ໃດມາພຸ້ນ, ແນວນັ້ນໜາ. ມັນມີກົດໝາຍເຈົ້າເຮັດຜິດຄືແນວໃດ, ມັນເປັນແນວນັ້ນນ່າ, ຫຼິ້ນລູກຫຼິ້ນເມຍໝູ່ເປັນຄືແນວໃດເສຍອີ່ຫຍັງ, ແນວນັ້ນນ່າ. ຄົນທຸກມັນຢ້ານແນວນັ້ນ. ໝູ່ບອກເພິ່ນໄປກໍ່ໄປ, ໃຫ້ເພິ່ນເຮັດອີ່ສັງກໍ່ເຮັດ. ຍາມເຮັດໄຮ່ເຮັດນາ, ເຮັດເຮືອນຢູ່ເຮືອນເພິ່ນແລ້ວ, ເຮືອນຜູ້ສາວກໍ່ແລ້ວ. ຜູ້ສາວຊວນເພິ່ນໄປສັກໄຮ່ສັກສວນເຮືອນນັ້ນເພິ່ນກໍ່ໄປແຫລະ, ບາດຜູ້ອື່ນເຂົາບໍ່ຫານຊວນ, ຊວນລຸງສຸບິນກໍ່ໄປນໍາເຂົາແນວນັ້ນເລື່ອງມັນຫັ້ນໜາ, ຕອນເພິ່ນຍັງໜຸ່ມເປັນແນວນັ້ນ.

ເວລານັ້ນ ການນຸ່ງຖືຂອງລຸງສຸບິນນີ້ໄດ້ນຸ່ງກະຕຽວ ໂອຍບໍ່ໃຫ້ວ່າແລ້ວແນວນັ້ນ, ຂໍໂທດນໍາແຫລະ ນຸ່ງກະຕຽວ ເພິ່ນວ່າຂ້າສອງຫາງຫັ້ນແລະ. ເພິ່ນເກົ້າຜົມ ທໍາມະດາຄືຜູ້ຍິງ[89] ນີ້ແຫລະ, ແນວນັ້ນແລະໂຕນີ້. ບໍ່ອໍາບໍ່ອາຍດອກເພິ່ນວ່າ,ໝູ່ເພິ່ນລາວລຸ້ມເວົ້າໃຫ້ເພິ່ນວ່າລາວເຫິງ, ເພິ່ນວ່າເຮົານີ້ລາວເຫິງ, ຂ້າສອງຫາງຊິຕິວະອີ່ຫຍັງ, ບໍ່ແມ່ນຊິອວດອີ່ງດອກ, ເກົ້າຜົມຄືໝູ່ຍິງຫັ້ນແລະ. ຮອດປີ 1951 ເພິ່ນຈຶ່ງໄດ້ຕັດຜົມ, ຫວຽດນາມມາແລ້ວເດຕອນນັ້ນ, ແລະກໍ່ຈຸທ່ານສີທົນກົມມະດໍາຫັ້ນນ່າ. ຜົມຫັ້ນເພິ່ນຂີ້ຄ້ານຫວີແດ່,ຜົມເພິ່ນມັນຍາວກະເທີນ, ເພິ່ນກໍ່ຕັດສາ, ຕັດເລີຍບໍ່ຈີ່ງອີກ. ໝູ່ເພິ່ນວ່າເຈົ້າຕັດເຮັດຫຍັງ, ເພິ່ນວ່າຕັດແລ້ວບໍ່ປະໃຫ້ມັນຍາວ, ມີເຫົາມີເມັນແນວນັ້ນນ່າ. ເວລານັ້ນ ປີ 1951 ກະຕຽວເພິ່ນກໍ່ຍັງນຸ່ງຢູ່, ຜົມເພິ່ນຫາກໍ່ຕັດ, ແຕ່ວ່າດຽວນີ້ກະຕຽວກໍ່ບໍ່ມີແລ້ວ. ເຄື່ອງນຸ່ງແຕ່ສະໄໝກ່ອນຫັ້ນ, ກ່ອນເພິ່ນຊິອອກເຮັດການປະຕິວັດເພິ່ນຂາຍ

---

89 ແຕ່ກ່ອນຜູ້ຊາຍເຜົ່າຕະລຽງ ໜຸ່ມເຖົ້າທຸກຄົນຈິ່ງຜົມຍາວ ແລະເກົ້າຜົມຄືຜູ້ຍິງນຸ່ງກະຕຽວຍາວ.

ໝົດ, ເພິ່ນຂາຍຊີ້ໝູແລ້ວຂາຍໝູ ເອົາເງິນ. ປີ 1951-1952 ລຸງສຸບິນຈຶ່ງໄດ້ລ້ຽງເສືອ, ເພິ່ນໄດ້ລ້ຽງຊ້ອນເສືອຊ້ອນແລ້ວ. ໃນບ້ານເພິ່ນນີ້ບໍ່ມີດອກຜ້າຣິ່ມຜ້າປົກອີ່ສັງຫັ້ນ, ເພິ່ນຂາຍໝົດ. ເພິ່ນໄປເຮັດການປະຕິວັດກໍ່ເອົາຜ້າຣິ່ມນຳຫວຽດນາມແນວນັ້ນ. ມູນມໍລະດົກກ່ອນອອກເຮັດການປະຕິວັດຫັ້ນບໍ່ມີຫຍັງແລ້ວ.

ເອົ້າລຸງສຸບິນເລີ່ມເຮັດການປະຕິວັດແຕ່ຍັງບໍ່ທັນຕັດຜົມ, ແຕ່ປີ 1948 ພຸ້ນເປັນກອງຫຼອນ, ເວລາເພິ່ນນັ້ນ ຍັງບໍ່ທັນໄດ້ອອກເຮັດອິດສະຫຼະ, ແຕ່ວ່າເພິ່ນໄດ້ຕິດຕໍ່ກັບອ້າຍນ້ອງເພື່ອນຫວຽດນາມແດ່ແລ້ວ, ເພິ່ນໄດ້ໝັ່ນສືບໝັ່ນຖາມແຖວເຊກະໝານນີ້ແລ້ວ, ແນວນັ້ນ. ເວລາລຸງສຸບິນພົວພັນກັບອິດສະຫຼະ, ພໍ່ແມ່ຂອງເພິ່ນກໍ່ບໍ່ໄດ້ຫ້າມ, ພໍ່ແມ່ເພິ່ນວ່າແລ້ວແຕ່, ມີແຕ່ເຂົາຖາມເພິ່ນວ່າເຈົ້າຊິໄປນີ້ໄປແນວໃດລ້ຽງເສືອເຈົ້າກໍ່ບໍ່ມີ, ເພິ່ນຕອບວ່າ: "ບໍ່ມີບໍ່ຍາກດອກເອົານຳອ້າຍນ້ອງເພື່ອນ, ເຮົາມີໝູ່ຄູ່ອ້າຍນ້ອງຢູ່, ຈຸຈູງ, ນາຍເດ, ນາຍດ່ອງ, ເພື່ອເຮົາຊຸມນັ້ນແລ້ວເອົາລ້ຽງເສືອໃຫ້ເຮົາ, ຜ້າຣິ່ມມຸ້ງ, ສະບູຊຸມນັ້ນ ແລະເອົາໃຫ້". ເພິ່ນເຂົ້າໂຮງໝໍຮອດດຶກທໍ່ເຂົາກໍ່ມາຢາມ, ຈຸງ, ຈຸເຈົ້າ, ນາຍເດ, ນາຍດ່ອງເຂົາມາຢາມເພິ່ນຮອດ 7-8 ຄົນແນວນັ້ນ. ລຸງສຸບິນເຂົ້າໂຮງໝໍ, ເຂົາໄດ້ຍິນຂ່າວວ່າລຸງສຸບິນເຂົ້າໂຮງໝໍ, ເຂົາເອົາເງິນມາຊ່ວຍລຸງສຸບິນ, ເຂົາເອົາເງິນເຈ້ຍນັ້ນ, ຢາທີດຫັ້ນມາຕ້ອນ, ໄລຍະນັ້ນລຸງສຸບິນບໍ່ໄດ້ສູບຢາ, ເພິ່ນກໍ່ຂາຍໃຫ້ຄົນອື່ນ, ເພິ່ນກໍ່ສູບເລັກໆໜ້ອຍໆ. ເວລາລຸງສຸບິນຢູ່ເຮືອນພໍ່ເພິ່ນກໍ່ເຮັດການປະຕິວັດຄືກັນ, ເຂົາລ້ຽງເຂົ້າລ້ຽງນ້ຳໃຫ້ອ້າຍນ້ອງເພື່ອນ. ບ່ອນໃດເຂົາຕີສັດຕູ, ພໍ່ລຸງສຸບິນໄປລ້ຽງເຂົ້າ, ແຕ່ງກິນໃຫ້ເຂົາແນວນັ້ນ. ເຮືອນຂອງລຸງສຸບິນ ກໍ່ບໍ່ໃຫຍ່ດອກເວລານັ້ນ, ສ່ຳເຮືອນລູກເພິ່ນນີ້ແຫລະ (ຢູ່ແຂວງເຊກອງ).

ເມື່ອສະພາບມັນປ່ຽນແປງ, ລຸງສຸບິນຮູ້ວ່າອິດສະຫຼະມາໂຄສະນາ, ພໍ່ເພິ່ນໃຫ້ໄປໂອຍບໍ່ໄດ້ລັບລີ້ອີ່ຫຍັງ, ຕາແສງພວກເພິ່ນເວົ້າແບບເປີດເຜີຍໂລດ, ຂອງສັດຕູມັນຍັງບໍ່ທັນເຂົ້າມາບ້ານເພິ່ນເດ. ເຂດພວກເພິ່ນມັນຕິດຈອດກັບຊາຍແດນເຂດພາກໃຕ້ຫວຽດນາມ, ຟາກນີ້ເຊຂະໝານຟາກນັ້ນຫວຽດນາມ. ທາງນີ້ເພິ່ນໄປລ້ຽງຂ່າວໃຫ້ກັນເລື້ອຍໆ, ບໍ່ເວົ້າແຕ່ລຸງສຸບິນພາໄປລ້ຽງຂ່າວ, ຄົນ

ອື່ນ ກໍ່ໄປຄືກັນ,ບາງເທື່ອຊວນໝູ່ເພິ່ນໄປເຂົາບໍ່ໄປນຳ, ເຂົາຕິດສາວເຂົາກໍ່ໄປຫຼິ້ນສາວ, ເພິ່ນໄປ, ບໍ່ແມ່ນເພິ່ນຢາກເວົ້າອັນນີ້. ກະເທີນເພິ່ນອອກແລ້ວເພິ່ນຢູ່ບໍ່ໄດ້ເດ, ກະເທີນອອກແລ້ວເພິ່ນອອກເລີຍ.

ເອົ້າລຸງສຸບິນໄປຫັ້ນນ່າ ຊາວບ້ານເຂົາເອົາເງິນມາໃຫ້ປານນີ້ (ຫຼາຍເງິນ), ເງິນສາມນາງ, ແຕ່ເພິ່ນບໍ່ເອົາຈັກກີບ, ເພິ່ນເວົ້າວ່າ: "ເຮົາບໍ່ເອົາ, ເຮົາໄປແນວໜ້າພຸ້ນມີກໍ່ກິນບໍ່ມີກໍ່ຢ່າ, ບໍ່ແມ່ນຊິມີແຕ່ເຮົາຊິໄປ, ເງິນເອົາໄວ້ໃຫ້ຜູ້ອື່ນໄປນຳຫັງ". ແນວນັ້ນລຸງສຸບິນບໍ່ເອົາເດັດຂາດ. ເອີມີແຕ່ເພິ່ນເອົາຂາໝູຫັ້ນແລ້ວໄປກິນ. ໝູ່ເພິ່ນກໍ່ມາໝົດບ້ານຫັ້ນແລ້ວ, ເຂົາຂ້າໄກ່, ແລະ ໝູບັກໃຫຍ່ມາກິນ, ເຂົາຟ້ອນໝົດຄືນແລ້ວ, ກິນຮອດເຊົ້າມື້ອື່ນ, ເມົາເຫຼົ້າກົກ [90] ຕິປະທຳປະຫຼາດອີກກະທີກ. ໝົດບ້ານພວກເພິ່ນຕາແສງພວກເພິ່ນບໍ່ໄດ້ປິດລັບ, ບໍ່ແມ່ນຊິເວົ້າຊອບໆແຊບໆ, ເວົ້າອັນໃດກໍ່ເວົ້າໄປກາໆໂລດ,ໃຜຢາກໄປກໍ່ໄປ. ຫົວໜ້າຈຸຫົວໜ້າໜ່ອຍເພິ່ນກໍ່ເວົ້າວ່າໃຜຢາກໄປກໍ່ໄປ, ໃຜບໍ່ຢາກໄປກໍ່ຢ່າ, ປີ 1953 ລຸງສຸບິນອອກເລີຍ. ປີ1948 ລຸງສຸບິນພໍ່ພັນນຳບ້ານນຳເມືອງ, ເຮັດໄຮ່ເຮັດສວນໄລຍະນັ້ນ. ຕອນລຸງສຸບິນອອກນີ້ມີຄົນໄຫ້ນຳເພິ່ນແລ້ວ, ຜູ້ຍ່າຜູ້ຍິງນີ້ໄຫ້ອີກກະທີກ, ແລະກໍ່ຈ້ອງເບິ່ງເພິ່ນ,ແລ້ວເຂົາກໍ່ເອົາໄກ່ຜູ້ລະໂຕມາມອບ, ແຕ່ເພິ່ນບໍ່ຖື, ເພິ່ນເອົາ 500 ທໍ່ນັ້ນ. ໃຜໄດ້ເງິນ 500 ແຕ່ກີ້ສຳໄດ້ເງິນເປັນລ້ານດຽວນີ້, ບໍ່ແມ່ນຊິໄດ້ງ່າຍໆ, ແຕ່ເພິ່ນຂາຍໝູບັດກໃຫຍ່ກໍ່ຍັງໄດ້ແຕ່ກີບຫ້າທໍ່ນັ້ນ, ງົວນີ້ເພິ່ນຂາຍໄດ້ແຕ່ຫຼຽນໜຶ່ງ. ອັນຊິຂາຍເຄື່ອງຫັ້ນ ເພິ່ນໄປຮັບເອົາຜັກຢູ່ອັດຕະປືໄປຂາຍຢູ່ຫວຽດນາມເຕັມ 5 ກະລຸມ ເທື່ອໜຶ່ງເອົາໄປຂາຍໄດ້ເງິນແຕ່ຫຼຽນຫ້າ. ແນວນັ້ນກ່ອນຊິໄດ້ເງິນ. ອັດຕະປືນີ້ເພິ່ນໄປລຽນຕິດ, ຕາມທາງແບ່ງໜອງອູນີ້ເພິ່ນໄປຄ້າຂາຍແຕ່ກີ້.

ລຸງສຸບິນນີ້ຮັກພໍ່ແມ່, ທໍ່ກັນໝົດ. ແມ່ເພິ່ນຕາຍແຕ່ເພິ່ນຍັງນ້ອຍ, ເພິ່ນຢູ່ນຳພໍ່, ມີແຕ່ແມ່ເພິ່ນຜູ້ທີສອງກັບແມ່ເພິ່ນຜູ້ທີສາມນີ້, ອັນນີ້ເພິ່ນກໍ່ຮັກແພງກັນ

---

[90] ເຫຼົ້າກົກແມ່ນເຫຼົ້າໄຫ, ເຜົ່າຕະລຽງເຄີຍກິນເຫຼົ້າໄຫເຂົ້າກະນຽນ. ເຂົາຕີປະຮາດຮູບມັນຄືຄ້ອງ.

ແທ້. ແມ່ທີສີ່ນີ້ຕາຍປີກາຍນີ້.ລຸງສຸບິນ ທັ້ນໄດ້ເຫັນໝົດແມ່ທີສອງທີສາມ. ລູກ ນ້າພວກເພິ່ນກໍ່ຮັກທັ້ນແລ້ວ, ເມື່ອໃຫຍ່ແລ້ວພວກເພິ່ນໃຊ້ວຽກໃຊ້ງານ, ເຮັດໄຮ່ ເຮັດສວນ, ຮັກແພງທັ້ນແລ້ວ. ແຕ່ກ່ອນມັນບໍ່ຄືດຽວນີ້, ຊີວິດຂອງລຸງສຸບິນແຕ່ ຍັງໜຸ່ມຍັງໄວເດັກທັ້ນນ່າ ແມ່ນສາມປີເຈັບໄຂ້ເທື່ອໜຶ່ງ, ຕາມ ພໍ່ເພິ່ນເວົ້າໃດ. ເພິ່ນເປັນໄຂ້ເປັນໄຊນີ້ ຄັນເປັນແລ້ວເປັນໜັກຈິນຮອດສາມເດືອນພຸ້ນ, ແຕ່ທັ້ນ ມາເພິ່ນບໍ່ເຈັບບໍ່ເປັນ, ພີ້ຈິນຮອດເພິ່ນເຖົ້າໂຮມສອງແຂວງ. ຢູ່ຫວ່າງດນານລຸງ ສຸບິນກໍ່ເຈັບອີກໝົດປີ,ແນວນັ້ນໜາ. ລຸງສຸບິນບໍ່ໄດ້ກິນເຂົ້າໝົດປີ, ເກືອເພິ່ນບໍ່ ໄດ້ກິນເຂົ້າປີໜຶ່ງ, ຖືວ່າເພິ່ນກິນເຂົ້າປຽກລ້າໆ. ເພິ່ນກິນແນວນັ້ນແລ້ວມັນກໍ່ ເຄີຍພໍ້ກິນ. ຮອດປີ 1955 ເດືອນ 7 ເດືອນ 8 ເພິ່ນພັດເປັນທ້ອງບິດອີກ, ຫຼັງຈາກທັ້ນເພິ່ນມາຈຶ່ງດີ. ແຕ່ກ່ອນເພິ່ນເຈັບນີ້ຄິດວ່າເພິ່ນຊິຕາຍແລ້ວໜາ.

ບາດນີ້ລະບຽບຂອງພໍ່ຂອງແມ່ເພິ່ນ ມີຕໍ່ລູກແຕ່ຢູ່ເຮືອນທັ້ນນ່າ, ເປັນ ຕົ້ນແມ່ນການກິນການຢູ່ນີ້: ໜຶ່ງແມ່ນການກິນເປັນຕົ້ນກິນເຫຼົ້າເມົາຢາ, ໂຕນີ້ ແມ່ນເພິ່ນໜັກກວ່າໝູ່, ເຂົາເລັ່ງໃດທັ້ນເວລາກິນ, ພໍ່ເພິ່ນບໍ່ໃຫ້ເພິ່ນກິນຍ້ານ ເຮັດທິ່ວທິບທິ່ວແດນ. ສອງລະແມ່ນມັກລັກຈິກມັກຫໍ່, ອັນນີ້ພໍ່ແມ່ເພິ່ນກໍ່ສັ່ງ ສອນແລ້ວ: "ຄັນລັກມັກຈິກຫໍ່ແລະບໍ່ເປັນ, ເຮົາຄືນທຸກຄືນຍາກ, ລັກເອົາຂອງ ໝູ່ບໍ່ໄດ້". ເພິ່ນເຫັນໝາກອຶໝາກແຕງບໍ່ເຄີຍເອົາ, ເພິ່ນຄູມື້ນີ້ກໍ່ຄືກັນໝາກພິກ ໜ່ອຍໜຶ່ງກໍ່ບໍ່ກ້າປິດຂອງໝູ່, ຄັນບໍ່ເຫັນເຈົ້າຂອງມັນ. ໜຶ່ງ ແລະບອກກັບລະ ບຽບແປດຂໍ້, ວິໃນສິບສອງຂໍ້ຕໍ່ປະຊາຊົນຂອງກອງທັບອັນນີ້ເພິ່ນໄດ້ຮຽນ, ແລະ ລະບຽບກົດໝາຍຂອງບ້ານເມືອງກໍ່ຫ້າມແທ້ແນວນີ້, ການລັກມັກຈິກຫໍ່, ເພິ່ນ ເຮັດສັດຊື່ໄປບ້ານໃດກໍ່ດີ. ສອງມາລະຫວ້ານຢາເພິ່ນບໍ່ເຮັດເພາະບໍ່ດີ, ຈັກ ໜ່ອຍແລ້ວຖືກໝູ່ໃສ່ຫວ້ານໃສ່ຢາຕາຍ. ມັນມີແຕ່ໃດມາວັດຖຸໂຕນີ້, ພໍ່ແມ່ເພິ່ນ ເກືອດຫ້າມໂຕນີ້, ແລະພໍ່ແມ່ເພິ່ນກໍ່ຊຸກຍູ້ເລື່ອງເຮັດໄຮ່ເຮັດແນວມັນດີນີ້, ບໍ່ໃຫ້ ຢູ່ຊື່ໆ ລຸງສຸບິນເຮັດອີ່ຫຼືອໍ່ຫຼໍ່ແທ້ແລ້ວ, ພໍ່ເພິ່ນເຈັບສາມສີ່ປີເພິ່ນນີ້ເຮັດຜູ້ດຽວກັບ ນ້ອງເພິ່ນນັ້ນແລ້ວ. ພວກເພິ່ນສາມຄືນບໍ່ອຶດບໍ່ຢາກປານໃດ, ປີໜຶ່ງອຶດແທ້ໝົດ ບ້ານເພິ່ນພາກັນອຶດ, ປີນັ້ນພວກເພິ່ນຂຸດກອຍຂຸດມັນຕາມປ່າຕາມດົງນີ້ແລ້ວ

ກິນ. ສະໄໝກ່ອນບໍ່ມີດອກໄປຮັບຈ້າງຮັບບ່າຍ. ສະໄໝກ່ອນບໍ່ໃຫ້ໄປເດີກໄປໄກ, ໄປເດີກໄປໄກຖືກຈັບ, ເຂົາເອີ້ນວ່າເສິກລາວເທິງທັ້ນໜາ, ແນວນັ້ນ. ຄັນເພິ່ນໄປກໍ່ຫາກຢູ່ໃນຂອບເຂດສູງສຸດປະມານສໍ່ານີ້ສໍ່າບ້ານດຽວນີ້, ສໍ່າບ້ານບຸ່ງບ້ານປາກໂທນນີ້ແລ້ວ, ເພາະເພິ່ນຢ້ານ. ໝົດທໍ່ນັ້ນແລ້ວ, ມີແຕ່ທາງເມືອງສານໄຊນີ້ແລ້ວເພິ່ນເຄີຍໄປ.

ນອກຈາກເຮັດວຽກເຮັດງານແລ້ວ, ລຸງສຸບິນເຄີຍຫຼິ້ນເຮັດເສິກແຕ່ຍັງນ້ອຍ, ຕົວຢ່າງເພິ່ນຫຼິ້ນແບບນີ້ ເຈົ້າເປັນຝຣັ່ງຂ້ອຍເປັນທວຽດ ແລະ ຕີກັນໂອຍແຕ່ຍັງນ້ອຍທັ້ນເພິ່ນເຄີຍຫຼິ້ນດອກ, ເພິ່ນເອົາບັ້ງໂພະທັ້ນເດຍິງກັນ, ເພິ່ນຫຼິ້ນແນວນັ້ນເດັກນ້ອຍ. ແລະພວກເພິ່ນກໍ່ເຄີຍຫຼິ້ນແບບປ້ຳກັນ, ລອງເຮື່ອແຮງກັນເຄີຍ, ແຕ່ວ່າເພິ່ນບໍ່ຜິດກັນດອກ. ບາງເທື່ອພວກເພິ່ນກໍ່ຜິດກັບບ້ານອື່ນ, ຍ້ອນລອງແຮງປ້ຳກັນທັ້ນ, ກໍ່ແມ່ນສ່ວນຫຼາຍໃນບ້ານພວກເພິ່ນເອງນີ້.

ບາດນີ້ ເລື່ອງຮຽນລຸງສຸບິນໄປຮຽນນຳຜູ້ເຖົ້າຜູ້ໂອ່, ບາງເທື່ອເພິ່ນສັງເກດການ, ບາງເທື່ອເພິ່ນເຫັນເຂົາເຮັດເຮືອນ, ເພິ່ນມັກຖາມມັກສົ້ເຂົາ, ສົນໃຈ. ເພິ່ນມັກທັ້ນແລ້ວຖາມສົ້ເຂົາ. ຊູ້ມື້ນີ້ບາງເທື່ອເພິ່ນເຮັດໄດ້: ໜຶ່ງນີ້ກະບຽນເພິ່ນເຮັດໄດ້, ສອງແລະແມ່ນກະຕິບເຂົ້າ. ຍາງໄກ່ນີ້ເພິ່ນເຮັດບໍ່ໄດ້, ເພາະເພິ່ນຮຽນບໍ່ເຖິງ, ອັນອື່ນເພິ່ນກໍ່ເຮັດໄດ້, ເພິ່ນຮຽນນຳພໍ່ເຖົ້າ, ບາງເທື່ອເພິ່ນກໍ່ຮຽນນຳຜູ້ເຂົາເປັນ.

ບາດນີ້ເພິ່ນເຂົ້າຮີດຄອງອັນນັ້ນເພິ່ນບໍ່ສົນ, ມີແຕ່ຜູ້ໃຫ່ຍເຂົາເຮັດເລີຍ. ເລື່ອງໄປງານນັ້ນງານນີ້ເວລາເຂົາຟ້ອນເພິ່ນກໍ່ເຮັດນຳໝູ່ຢູ່, ເຂົາເຮັດແນວໃດເພິ່ນກໍ່ເຮັດນຳເຂົາ, ເລື່ອງຮີດຄອງກໍ່ບໍ່ມີຫຍັງໜັກ. ເຮັດບຸນຮູດເຂົ້ານີ້ກໍ່ສອງເທື່ອ, ຫຼືວ່າເວລາເຂົາເຈັບເຂົາເປັນທັ້ນຂ້າງົວຂ້າຄວາຍ, ອັນນັ້ນດອກອັນອື່ນແມ່ນບໍ່ມີຫຍັງ, ບໍ່ວ່າບ້ານລຸງສຸບິນ ບໍ່ວ່າບ້ານອື່ນ. ຈັ່ງວ່າເພິ່ນດີໃຈ ປີ 1962 ເພິ່ນຢູ່ຊຽງຂວາງ, ເວລາເພິ່ນປະຊຸມເພິ່ນໄດ້ຍິນຂ່າວວ່າຕາແສງພວກເພິ່ນລົບລ້າງຮີດຄອງປະເພນີ, ໂອຍດີໃຈທີ່ສຸດ. ດຽວນີ້, ຄູ່ມື້ນີ້ບໍ່ມີອີ່ຫຍັງແລ້ວ.

ຄວາມສຳນຶກ ຄວາມຄິດຂອງລຸງສຸບິນ ຊິອອກເປັນທະຫານອິດສະຫຼະ ເປັນວິລະຊົນນັກຮົບແຂ່ງຂັນ, ມີບົດບາດໃນສັງຄົມ, ເພິ່ນມີຜົນງານຕໍ່ປະເທດຊາດບ້ານເມືອງ, ເພິ່ນຍັງຮູ້ສຶກອີ່ຫຍັງຕໍ່ບຸນຄຸນຂອງພໍ່ແມ່, ເພິ່ນຍັງຄິດເຖິງຢູ່ຊູ່ມື້ນີ້, ໂອ! ພໍ່ເພິ່ນສອນແນວນັ້ນແນວນີ້, ເພິ່ນບໍ່ລືມຈັກເທື່ອຊູ່ມື້ນີ້ເພິ່ນຄິດເຫັນຄວາມເວົ້າຂອງພໍ່ແມ່ສັ່ງສອນແຕ່ກ່ອນພຸ້ນ. ພໍ່ແມ່ເພິ່ນເຄີຍເວົ້າ: "ເຮັດພິສັງກໍ່ເຮັດໃຫ້ມັນດີ ເຮັດພິສັງກໍ່ເຮັດໃຫ້ມັນຖືກ". ຄິດໄປຄິດມາ, ຄົ້ນຄວ້າໄປຄົ້ນຄວ້າມາ. ເພິ່ນເຫັນຊູ່ມື້ນີ້ມັນຖືກກັບຄວາມບູຮານເພິ່ນເວົ້າ: ບ່ອນໃດກໍ່ຖືກ, ຊິປຽບໃສ່ການປະຕິວັດກັບບູຮານເພິ່ນເວົ້າກໍ່ຖືກຄືກັນ. ບູຮານເພິ່ນເວົ້າສົມມຸດວ່າ, ຖ້າທຽບໃສ່ເດີມັນຖືກອີ່ຫຼີ, ແນວນັ້ນ. ຄວາມນີ້ລຸງສຸບິນຄິດເຫັນບຸນຄຸນຂອງແມ່, ເພິ່ນຄິດເຫັນຕອນຜູກແຂນນີ້: ຢູ່ອັດຕະປືໃນບຸນໄຊຊະນະ ຝ່າຍເຕັມໝົດສອງແຂນເຂົາຜູກໃຫ້ເພິ່ນ, ເຂົາເຮັດຂ້ອນໃຫ້ເພິ່ນສາມມື້ສາມຄືນຢູ່ອັດຕະປື, ເພິ່ນກິນຈົນເບື່ອຊີ້ນງົວພຸ້ນ, ງົວໂຕໜຶ່ງໝວດໜຶ່ງມື້ໜຶ່ງ. ອອກຈາກພຸ້ນພວກເພິ່ນຮອດເລົ່າງານກໍ່ຜູກແຂນອີກ, ມີຄວາມໜຶ່ງນາງອັນນັ້ນເວົ້າ, ບໍ່ແມ່ນມັນຊິເວົ້າຫຼາຍ, ລຸງສຸບິນຈື່ຈົນເທົ່າສູ່ມື້ນີ້, ມັນວ່າ: ອ້າຍເອີຍ ໄປເຮັດການປະຕິວັດນີ້ເຮັດໃຫ້ມັນດີ, ບໍ່ໃຫ້ເຕັ້ນໂຕນໂຍນໜີ, ຄັນເຕັ້ນໂຕນໂຍນໜີພວກນ້ອງບໍ່ເບິ່ງໜ້າ, ເຮັດດີລະພວກນ້ອງຕ້ອນຮັບຢ່າງສຸດຂີດ. ທີ່ນັ້ນມັນວ່າ. ຮ້ວາຍ! ນ້ຳຕາລຸງສຸບິນກໍ່ຍາວອອກໂລດແລ້ວ, ເຂົາເວົ້າເພິ່ນກໍ່ໄຫ້ໂລດແລ້ວ, ພໍ່ແມ່ເພິ່ນເວົ້າກໍ່ເວົ້າແນວນັ້ນ. ຈັ່ງຊັ້ນເພິ່ນຈຶ່ງຄິດໂຕນີ້ມັນແມ່ນແນວນັ້ນ. ດັ່ງນັ້ນເວລາລຸງສຸບິນໄປແວ່ເພິ່ນຈຶ່ງໄດ້ໄປຢາມເຂົາ, ເພາະເຂົາໄດ້ສັ່ງສອນແຕ່ກ່ອນເພິ່ນຄິດແລ, ຜູ້ເຖົ້າເຂົາເວົ້າແນວໃດເພິ່ນກໍ່ຄິດ, ແລະຄົ້ນຄວ້າ. ຊູ່ມື້ນີ້ ເພິ່ນເວົ້ານຳທະຫານມັນເມື່ອຍ,ເພິ່ນເວົ້າໄປເວົ້າມາແລ້ວຍາກ, ບໍ່ຄືທະຫານສະໄໝກ່ອນ, ທະຫານສະໄໝກ່ອນນີ້ ຊັ້ນເທິງເວົ້າຄວາມໜຶ່ງເຂົາຄົ້ນຄວ້າ, ຊູ່ມື້ນີ້ເພິ່ນກໍ່ເຫັນຢູ່ແນວນັ້ນແຫລະ. ກໍ່ຖືວ່າລັດຖະບານກໍ່ບໍ່ໄດ້ລືມເນາະກະຕອບສະໜອງພໍສົມຄວນ.

ແລ້ວຫຼັງຈາກນັ້ນ ໃນໄລຍະທີ່ເພິ່ນພັກຜ່ອນກໍ່ມາດຳລົງຊີວິດຢູ່ເຊກອງ, ແບບເຮັດປະຈຸບັນນີ້ ມີການແຕ່ງງານເທື່ອດຽວບໍ່ໃນຊີວິດ.ດຽວນີ້ເມຍເພິ່ນກໍ່ຍັງ

ໄປຕະຫຼາດໄດ້ສະບາຍ, ລູກເພິ່ນສອງຄົນກໍ່ຢູ່ນຳກັນ. ລູກເພິ່ນທີ່ເອົາເມຍຫວ່າງມໍ່ໆນີ້ກໍ່ເອົາເມຍນີ້ກໍ່ເຮັດວຽກປ່າໄມ້ແຂວງ, ລູກຫຼ້າເພິ່ນເຮັດວຽກອຸດສາຫະກຳ ສຳຫຼວດບໍ່ແຮ່.

ຊີວິດການເປັນຢູ່ຂອງພໍ່ກໍ່ທຳມະດາ, ນາມສະກຸນຂອງພໍ່ແມ່ແກ້ວຍອດສິງ. ເອົາຊື່ແມ່ເພິ່ນ, ຊື່ພໍ່ເພິ່ນ, ຊື່ປູ່ເພິ່ນໝົດໂອ໋. ແລ້ວປີນີ້ລຸງສຸບິນອາຍຸຂອງພໍ່ເພິ່ນແມ່ນໄດ້ 74 ປີ ແລ້ວ. ຊື່ພໍ່ຂອງລຸງສຸບິນວ່າແກ້ວອັນນີ້, ແມ່ຂອງເພິ່ນຍອດ,ພໍ່ເຖົ້າເພິ່ນກໍ່ສິງ. ເພິ່ນມີອ້າຍເອື້ອຍນ້ອງສອງຄົນແຕ່ຜູ້ໜຶ່ງຕາຍແລ້ວຍັງແຕ່ຜູ້ດຽວນີ້ແຫລະ. ຜູ້ນັ້ນເປັນຜູ້ຊາຍເພິ່ນຕາຍແລ້ວ, ຕາຍສອງສາມປີ, ເປັນນ້ອງຊາຍ. ນ້ອງຊາຍຜູ້ນັ້ນ ກໍ່ເຂົ້າຮ່ວມຂະບວນການປະຕິວັດ ເປັນກອງຫຼອນ. ເປັນກອງຫຼອນຢູ່ບ້ານນີ້. ເພິ່ນກໍ່ເປັນກອງຫຼອນແນວນັ້ນ ເລື່ອງມັນສິ່ງເຂົ້າ ສິ່ງນ້ຳ ໃຫ້ອ້າຍນ້ອງເພື່ອນ ແມ່ນເພິ່ນແຫລະສິ່ງ.

ທຳອິດກໍ່ແມ່ນເພິ່ນ, ຕໍ່ມາກໍ່ແມ່ນລູກໆສືບທອດ.ເພິ່ນແຕ່ງງານກັບເມຍເພິ່ນປີ1966. ແລ້ວຊື່ເມຍເພິ່ນວ່າ ນາງຈັນທອງ. ເພິ່ນມີລູກນຳກັນເຈັດຄົນ, ຕາຍຜູ້ໜຶ່ງ ຢູ່ວັງວຽງປີກາຍນີ້ເປັນທະຫານ ແລະ ຕາຍຊ້ຳ. ເປັນສາລະບາດຈັກແນວໃດໄປຊັກເຄື່ອງລະລື່ມຢູ່ນ້ຳຫັ້ນລະຕາຍ. ລູກເພິ່ນໃນເຈັດຄົນນີ້ມີຜູ້ຍິງສາມຄົນ, ດຽວນີ້ຫັ້ນເອົາຜົວສອງ, ຍັງຜູ້ໜຶ່ງລູກຫຼ້າ. ລູກຊາຍເພິ່ນເອົາສອງລະຍັງຜູ້ໜຶ່ງ. ຊາຍສາມຄົນ. ລູກຂອງເພິ່ນມີເຈັດຄົນ, ດຽວນີ້ຍັງແຕ່ຫົກຄົນ. ຫົກຄົນນີ້ ຜູ້ໃດແດ່ໄດ້ເຂົ້າເຮັດວຽກລັດຖະການ. ມີຜູ້ໜຶ່ງເປັນທະຫານຕາຍແລ້ວ, ນອກນັ້ນແມ່ນເຮັດວຽກທາງການມີແຕ່ລູກຜູ້ທີ່ສາມກັບຜູ້ທີ່ສອງ, ຜູ້ທີ່ສອງແມ່ນຮຽນແພດແມ່ຍິງ; ຜູ້ໜຶ່ງຫັ້ນທະຫານ. ຜູ້ທະຫານນັ້ນຍັງສອງຄົນເປັນທະຫານ, ຜູ້ໜຶ່ງຫັ້ນແພດ, ຜູ້ໜຶ່ງຫັ້ນທະຫານຍັງເຮັດຢູ່. ລູກຊາຍທີ່ສາມຢູ່ໂຮງເລື່ອຍ.

ເອີ, ເລື່ອງບັນຫານີ້ແຕ່ກ່ອນມັນເປັນຈັ່ງຊີ້: ເພິ່ນເປັນທະຫານນີ້ແຕ່ປີສີ່ສິບແປດເປັນທະຫານກອງຫຼອນຢູ່ບ້ານ.

ເພິ່ນເກີດປີ 1930, ປີ 1945 ອອກເປັນກອງຫຼອນ. ບ້ານເກີດລຸງສຸບິນຢູ່ດຮາກຊາງ ເມືອງດາກຈຶ່ງພຸ້ນແຫລະ. ດາກຊາງນ້ອຍເມືອງດາກຈຶ່ງແຕ່

ກ່ອນຫັ້ນ,ດຽວນີ້ມັນບໍ່ມີຕາແສງລະເດ. ອັນນັ້ນເພິ່ນເປັນທະຫານສິ່ງນັ້ນອັນໜຶ່ງ, ອັນສອງນີ້ຂອງໝູ່ເພິ່ນວ່າໄປ, ເພິ່ນໄປທຳອິດບໍ່ຮູ້ອີ່ສັງດອກ. ເວົ້າຄວາມຊື່ໃດໝູ່ເພິ່ນພາໄປຕາຍກໍ່ໄປຕາຍຫັ້ນແລ້ວ. ແຕ່ວ່າໃຫ້ໄປຈັດຕັ້ງລັດຖະບານເຂົາເວົ້າຫັ້ນທຳອິດຫັ້ນປີສີ່ສິບແປດຮອດປີຫ້າສິບສອງເພິ່ນຢູ່ດານັງຢູ່ຫວຽດນາມພຸ້ນ, ປີຫ້າສິບສາມເພິ່ນກັບຄືນເປັນທະຫານ, ບັດນີ້ປີຫ້າສິບສີ່ເພິ່ນຈຶ່ງຂຶ້ນເຕົ້າໂຮມ, ເພິ່ນຍ່າງຮອດອັດຕະປືພີ້, ເພິ່ນຢູ່ອັດຕະປືແມ່ນອາທິດໜຶ່ງມີບຸນໄຊຊະນະຢູ່ອັດຕະປື ເດ ປີ 1954 ຫັ້ນ. ພວກເພິ່ນຍ່າງແຕ່ເຫງ່ອານ ໄປຟອງຮອດພາກເໜືອຫວຽດນາມເປັນທະຫານຫັ້ນ. ເພິ່ນຂຶ້ນນຳອ້າຍບົວໄຂຫັ້ນແລ້ວ. ພ້ອມດຽວແລະຢູ່ກໍ່ຍັງມີຫຼາຍຄົນ. ໄປພ້ອມກັບລຸງສຸບິນ, ບຸນລ້ອມ ຢຸສັນນີນີ້, ບົວໄຂນີ້, ໃຜແນ່ຄຳໄສກໍ່ຕາຍ, ຄຳບາງນີ້ກອງດຽວນີ້ ອອກແຕ່ນີ້ແລ້ວ, ພວກເພິ່ນອອກແຕ່ອັດຕະປືນີ້. ບາດພວກເພິ່ນຮອດຫີນລາດ ບ້ານໃໝ່ຊຸມນີ້ໄປຕ່າງໄປກ່ອນ, ເຂົາຢູ່ກອງເຈັດຮ້ອຍແປດສິບຫ້າ, ລຸງສຸບິນຢູ່ເຈັດຮ້ອຍສິບເອັດ. ອັນນັ້ນກອງອ້າຍພິມມາ ພ້ອມຫວຽດນາມພຸ້ນ ເຈັດຮ້ອຍສິບເອັດ ຍັງໄປຜົ້ງສາລີ, ເຈັດຮ້ອຍແປດສິບຫ້າໄປຊຳເໜືອ, ປຸ່ນອີກໃດຫັ້ນເລື່ອງເປັນທະຫານໃດ ພວກເພິ່ນໄດ້ຍ່າງໄປຮອດຊຳເໜືອລຸງສຸບິນກໍ່ຢູ່ກອງນີ້, ໄປຕິດຢູ່ຫ້ວຍເທົາຢູ່ຊຳເໜືອກອງຫ້າແປດຫ້າ, ອອກຈາກຫັ້ນໝວດລຸງສຸບິນຢູ່ວຽງຈັນຫັ້ນ. ເພິ່ນຢູ່ໃນວຽງເດືອນໜຶ່ງລະໄປຢູ່ເມືອງປູນ, ເພິ່ນອອກຈາກເມືອງປູນລະເພິ່ນໄປປະຊຸມຊາວໜຸ່ມເພິ່ນຖືກຢູ່ຊາວໜຸ່ມຕະລຸມບອນເດປີຫ້າສິບຫ້າ. ອັນນັ້ນກໍ່ຊາວໜຸ່ມຕະລຸມບອນສະໄໝນັ້ນກໍ່ຢູ່ຄືວ່າຫັ້ນແລ້ວ, ຍາກຊິອອກໄດ້ໝົດກອງຮ້ອຍພວກເພິ່ນມີແຕ່ສອງຄົນ. ເພິ່ນອອກຈາກຫັ້ນ ລະເພິ່ນເອົາໄປໂຮງຮຽນກົມມະດຳ ຢູ່ກາງໂມ່ງຫັ້ນຫົກເດືອນ, ອອກຈາກໂຮງຮຽນກົມມະດຳຫັ້ນ ເພິ່ນຈຶ່ງ ເຂົ້າສັບຊ້ອນກອງເຈັດແປດຫ້າ ບ້ານແປນເມືອງໄສ້ຍນີ້ບ້ານດານນີ້, ບ້ານງົ້ວໄປຕາມຫັ້ນ. ເພິ່ນອອກຈາກຫັ້ນ ເພິ່ນລະຂຶ້ນສະໜາມຂຶ້ນທາງນັ້ນເລີຍ ເພິ່ນຂຶ້ນພູກູດແຕ່ເຊົ້າຮອດສິບສອງໂມງຈຶ່ງຫວິດ. ຈົນຮອດຫ້າໂມງຕອນແລງ ຈຶ່ງຮອດຕີນມັນເມືອຢູ່ສະເລີຍຢູ່ກອງພວກເພິ່ນ: ໜຶ່ງລະແມ່ນເພິ່ນ ປົກປັກຮັກສາປິດນາລ້ອງ,

ປົດກຳໄຮ, ປົດປ່າແປກ, ປົດຕີກລາງ. ນີ້ແມ່ນໜ້າທີ່ກອງຮ້ອຍພວກລຸງສຸບິນ. ກອງຮ້ອຍພຸ້ນຢູ່ທາງເມືອງຊ້າງ, ອັນນັ້ນຢູ່ຫັ້ນ ພວກເພິ່ນໄປຢູ່ໄດ້ປີໜຶ່ງແລ້ວ ກັບຄືນມາຝຶກຝົນຫຼໍ່ຫຼອມ, ຈຶ່ງມາປະຈຳຢູ່ເຂດບ້ານດານອີກ ເຮັດເຮືອນເຈັດ ເດືອນ, ອອກຈາກຫັ້ນແລ້ວບາດນີ້ພວກເພິ່ນຂຶ້ນເທື່ອທີສອງ, ຂຶ້ນຮອດເທື່ອທີ ສອງແລ້ວເຂົາເອີ້ນວ່າ ໄລຍະນັ້ນແມ່ນໄລຍະສັນຕິພາບລະເດ. ເຂົາປະກາດ ສັນຕິພາບປີ ຫ້າສິບຫົກແມ່ນແລ້ວຫ້າສິບຫົກ. ບາດນີ້ພວກລຸງສຸບິນຢູ່ປົດນາ ສາງຫັ້ນ, ຈຸພັນເອກອີ່ສັງ ທະຫານສັດຕູກໍ່ອາດຈະມາຫັ້ນມາກວດຄະນະສາກົນ ເດ. ກວດລຸງສຸບິນຖິ້ມປືນຣະຣາມແລ້ວແຕ່ບໍ່ໃຫ້ມັນຮູ້. ເພິ່ນຈັ່ງເວົ້າຄືໂອ້ຍຖິ້ມ ແລ້ວເພິ່ນວ່າ ສັນຕິພາບແລ້ວເຮັດອີ່ຫຍັງ, ຢູ່ກໍ່ຊື່ໆແຫລະ, ບໍ່ໄດ້ຕີເສິກຕີເສືອອີ່ ສັງສຳບາຍແລ້ວ. ສັດຕູມັນບໍ່ຖາມດອກ, ລຸງສຸບິນເອງຖາມ. ອອກຈາກຫັ້ນລະ ແມ່ນລຸງສຸບິນລົງອີກບາດນີ້ ຢູ່ບ້ານຊຽງຮຽມປີນັ້ນ ປີລາວລວມລາວຫັ້ນເພິ່ນ ຮຽນກົດໝາຍ. ໃນການລວມລາວແນວນັ້ນເພິ່ນຢູ່ບ້ານຊຽງຫັ້ນ: ໜຶ່ງລະແມ່ນ ວ່າຮຽນໂຕນັ້ນ, ສອງແມ່ນການຈັດຕັ້ງສັບຊ້ອນໃຜສະໝັກໃຜບໍ່ສະໝັກອັນນັ້ນ. ແຕ່ລຸງສຸບິນເວົ້າຄວາມຊື່, ແຕ່ວ່າຄວາມຮູ້ມາບໍ່ຫຼາຍທໍ່ສ່ຳນີ້. ເພິ່ນກໍ່ເມືອເປັນ ກອງໝູນ, ບາດນີ້ລຸງສຸພາຫັ້ນເວົ້າເອີ: "ພວກລູກພວກຫຼານເອີຍປະຊາຊົນກໍ່ ແມ່ນອີງເຈົ້າ, ຂອງບ້ານກໍ່ໝູ່ເຈົ້າຕາແສງກໍ່ໝູ່ເຈົ້າ, ເມືອງກໍ່ໝູ່ເຈົ້າ, ແຂວງກໍ່ ເຈົ້າ". ລຸງສຸພານຸວົງເວົ້າຊັ້ນ ໂຍ່! ຢ້ານໃດລຸງສຸບິນ, ຢ້ານເຮັດບໍ່ໄດ້ຕີ, ເພິ່ນ ເອງເປັນນັກຮົບແປ່ດໆ ລະໃຫ້ເປັນຮອດເຈົ້າແຂວງ, ເຈົ້າເມືອງບໍ່ໄດ້ຕີ່ແນວ ນັ້ນ. ແນວນັ້ນເພິ່ນບໍ່ເມືອ, ໄດ້ເຂົ້າຮ່ວມນຳໝູ່. ຄັນສ່ຳດຽວນີ້ເພິ່ນກໍ່ສາມາດ ເປັນຢູ່ດອກຄະນະເມືອງແນວນັ້ນ. ຈັດຕັ້ງສັບຊ້ອນແລ້ວ, ເພິ່ນກໍ່ຍົກຍ້າຍຈາກ ບ້ານຊຽງ, ຮູ້ຢູ່ຫວາບ້ານຊຽງ? ເພິ່ນອອກຈາກຫັ້ນລະເມືອຊຳເໜືອພຸ້ນ, ລໍຖ້າ ກອງໝູນເມືອໝົດ, ທຳອິດນີ້ ກອງພັນທີໜຶ່ງເມືອກ່ອນ. ພວກອ້າຍບົວໄຂນີ້ບໍ່ ແມ່ນ.

ຈຸທີ່ໄປຢູ່ຫຼວງພະບາງ, ທາງຜົ້ງສາລີພຸ້ນ, ແນວນັ້ນຈຸກອງພັນທີໜຶ່ງ, ຈຸບັກງິກຫັ້ນເດໄດ້ຫຼຽນໄຊຊັ້ນໜຶ່ງ. ມັນກໍ່ໄປຕີສາຍໃຜຊິໄດ້ ໃນໄລຍະນັ້ນມີແຕ່

ງິກກັບອ້າຍສີທອງໃນປີຫ້າສິບຫ້າ. ປີຫ້າສິບທີ່ກອງປະຊຸມມະໂຫລານ ເຂົາເອີ້ນຢູ່ຊຽງລວງຫັ້ນ, ໃຜຊິໄດ້ໝົດທໍ່ນັ້ນມັນເປັນກອງພັນ, ໄປຮອດຫັ້ນກໍ່ຍອມເຂົາ. ບັດນີ້ພວກລຸງສຸບິນ ແມ່ນຢູ່ທົ່ງໄຫຫີນ, ອັນນັ້ນເລື່ອງມັນ, ແຕ່ຕົວຈິງແທ້ມັນປ່ຽນຫຼາຍຮູບມັນເຮັດທຳອິດນີ້: ພວກລຸງສຸບິນ ກອງພັນທີ່ໜຶ່ງສຸດທ້າຍມັນຢາກໃຫ້ເສຍໃຈພວກກອງພັນທີໜຶ່ງຫັນປ່ຽນ ເອົາກອງພັນທີໜຶ່ງມາເປັນກອງພັນທີສອງ. ທາງນັ້ນກອງພັນທີ່ໜຶ່ງຢູ່ທາງນີ້, ແນວນັ້ນມາ ລວມລາວຫັ້ນ. ຫຼັງຈາກລວມລາວແລ້ວອອກ. ບາດນີ້ຄຳສັ່ງເຂົ້າລວມຫັ້ນກໍ່ພົບຄວາມຫຍຸ້ງຍາກຢູ່. ລຸງສຸບິນກໍ່ຮູ້ດອກເຂົາລວມຫັ້ນ, ນີ້ເຂົ້າຊິກິນກໍ່ບໍ່ມີ. ອັນນັ້ນ ລົດຂອງພວກເພິ່ນພັດບໍ່ມີ. ຊຸມລຸງສຸບິນໄປຊື້ລົດຢູ່ວັງວຽງນີ້ພໍແຕ່ເອົາຟືນ, ຕົກນ້ຳກະພຸຍນີ້, ພວກລຸງສຸບິນທີ່ກຄືນຫາມກະພຸຍນີ້ພວກເພິ່ນ. ເຂົາບໍ່ໃຫ້ກິນເຂົາວ່າປະໃຫ້ຄອບຄົວ. ປານນັ້ນພວກເພິ່ນຫາບໄຖ່ເຂົ້າຜູ້ລະໄຖ່ນີ້ບໍ່ກິນ, ໂອ້ຍ ຄືທະຫານດຽວນີ້ ຄືວ່າຫັ້ນແຫລະຈະເຮັດລຽບໂລດແລ້ວ. ທະຫານປະຕິວັດ ປະຕິບັດໄດ້ດີອີ່ຫຼີ, ບໍ່ໄດ້ກິນປະໃຫ້ຄອບຄົວກິນ, ລູກເຕົ້າເຂົາລູກເມຍເຂົາ. ຜູ້ທີ່ອອກເຄື່ອນໄຫວນຳທະຫານລາບນີ້ຈະເອົາກະລາສີ ແລະໜັກໜ່ວຍຈຸປ້ອງກັນເຈະລູກເຈະເຕົ້າເຂົາ, ລູກອ້າຍອັນນັ້ນອອກນຳທາງກໍ່ນັ້ນແລ້ວແບກຫາບ [91] ພວກລຸງສຸບິນກອງປືນໃຫ່ຍ, ອອກຈາກຫັ້ນຈັ່ງມີອ້າຍນ້ອງເພື່ອນມາສິ່ງເຂົ້າບ່ອນ ພວກລຸງສຸບິນຢູ່ຈັ່ງຊັ້ນໜາ. ຖ້າພວກລຸງສຸບິນຢູ່ພວກເພິ່ນຕ້ອງຕາຍພວກທະຫານລາບ, ແນວນີ້ພູໄກ່ຂັນ [92] ທາງແຕ່ທ່າໂທມພຸ້ນ, ແຕ່ເມືອງໝອກພຸ້ນ, ແຕ່ເທິງພີ້ແຕ່ໜອງແຮດພີ້ໄປຫາເມືອງງານພີ້ກໍ່ໄປຫັ້ນ, ພໍດີພວກລຸງສຸບິນ ຫວິດປະມານສອງຫຼັກມັນສັດຕູມາຮອດສັດຕູຫັ້ນມາລັດຕີ, ພວກລຸງສຸບິນລົງແລ້ວໄປຕາມນ້ຳໂມ້ເລີຍ, ເລາະນ້ຳໂມ້,ແລ້ວເພິ່ນເຮັດຂົວອັນນັ້ນທາງມັນຂັ້ນຕົ້ນວັກທີໜຶ່ງ.ພວກເພິ່ນອອກ

---

[91] ເວລາພວກເພິ່ນເດີນທາງຕາມປ່າດົງ ກໍ່ມີເມຍພະນັກງານເກີດລູກເລີຍ, ພວກເພິ່ນກໍ່ພາກັນເຈະຫາມໄປເລີຍ.

[92] ຕາມທາງໄປແມ່ນພູໄກ່ຂັນທີ່ສູງຊັນ-ເຫວເລິກ, ສັດຕູສະກັດທາງ.

ຈາກຫັ້ນແລ້ວກໍ່ຮອດຫວຽດນາມ. ບາດນີ້ລຸງສຸບິນ ໄປເຄື່ອນໄຫວທາງຊ້ຳໃຕ້, ກອງພວກເພິ່ນແມ່ນທະຫານລາດແມ່ນໄປຊ້ຳໃຕ້, ແລ້ວແມ່ນພວກເພິ່ນເມືອ, ພໍດີເດືອນສິບເອັດຫາເດືອນສິບສອງຫັ້ນ ເພິ່ນໄປຮຽນຢູ່ຫວຽດນາມປີຫ້າສິບຫົກ, ບໍ່ແມ່ນນ່າເບິ່ງປີເກົ້າສິບແປດຫາປີຫົກສິບກອງແລເຮັດລັດຖະປະຫານ, ປີຫົກສິບແມ່ນລະປີຫົກສິບເພິ່ນໄປຊາຍແດນຈີນ ບ່ອນລຸງສຸພາກັບລຸງໄກສອນຢູ່ ຮູບພາບຊຸມນີ້ບໍ່ໄດ້ເອົາອອກ ແລະຢ້ານເສຍລັບ, ຫວຽດນາມຖາມວ່າຄືນທາງໃດ. ວ່າຄືນໄຕທາງວຽນ ເປັນຫຍັງບໍ່ຮູ້ພາສາຫວຽດບໍ່ແມ່ນເພິ່ນຢູ່ນຳຫວຽດສະເພາະ, ເພິ່ນຢູ່ນຳເຜົ່າຊົນພວກເພິ່ນເອງແຕ່ວ່າເຂົາເຈົ້າຢູ່ເບື້ອງຫວຽດນາມແນວນັ້ນ, ຜູ້ໃດຢາກອອກຜູ້ໃດຮູ້ພາສາຫວຽດລະແມ່ນໄປຂາຍຂ່າວໄປແຫລະ, ຜູ້ໃດຮູ້ສໍ່າໃດສໍ່າໜຶ່ງພໍແຕ່ປາກໄດ້, ຜູ້ບໍ່ຮູ້ນີ້ບໍ່ໄດ້ອອກ. ອັນນັ້ນຢູ່ຫັ້ນທີ່ເຂົາກຳນົດ, ລຶງສຸບິນໄປຮຽນຢູ່ຫັ້ນ ເຈັດປີຕາມກຳນົດມັນຮຽນຢູ່ແຂວງພູຖ້ຳຫັ້ນເຈັດປີ. ເຂົາວ່ານັກຮົບຜູ້ໜຶ່ງນີ້ໃຫ້ໄດ້ນັບແຕ່ລົດຖີບຮອດຂັບຍົນໄດ້, ເຂົາວ່າຄັນຂັບບໍ່ໄດ້ກໍ່ຕາມ, ແຕ່ວ່າລະດັບໃຫ້ຮູ້ວ່າຍົນຄັນໜຶ່ງ"ເຈົ້າຮູ້ວ່າຈັກພາກສ່ວນ, ໃຫ້ໄດ້ຫ້າສ່ວນຮ້ອຍເປາະສິບສ່ວນຮ້ອຍເປາະ, ໃຫ້ຮູ້ຄຸນນະພາບຂອງມັນ. ເພິ່ນເລີຍບໍ່ທັນເຮັດສັງ, ເພິ່ນເຮັດເຮືອນມື້ນັ້ນ ວັນທີດກິນເຂົ້າແລ້ວຂຶ້ນຫຼັງຄາເຮືອນມັນເຢັນເດ, ຍິນຂ່າວວ່າປີເກົ້າສິບແປດຫາປີຫົກສິບຮ້ອຍເອກກອງແລ, ຮ້ອຍຕີເລື່ອນເຮັດລັດຖະປະຫານຢູ່ວຽງຈັນວ່າຊັ້ນ. ໄດ້ຍິນກອງແລເວົ້າຫັ້ນແຫລະຂໍກຳລັງແນວລາວຮັກຊາດ, ເປັນຈັ່ງໃດກໍ່ຕາມຂໍມາຊ່ວຍແນ່. ແຕ່ວ່າຮອດບ່ອນວັງວຽງລະໝົດແຫລະ, ພວກລຸງສຸບິນຮູ້ແລ້ວຮູ້ກ່ອນແລ້ວ, ພວກເພິ່ນບໍ່ທັນໄດ້ຮ່ຳບໍ່ໄດ້ຮຽນອີ່ສັງແຫລະ, ພາກັນເຮັດແຕ່ເຮືອນກັບສະໂມສອນແລ້ວ, ເພິ່ນວ່າໂອ້ຍເມື່ອຍບໍ່ແມ່ນງ່າຍໆຫາບດິນຈີ່. ບໍ່ແມ່ນໝູ່ເຈົ້າຊິໃຫ້ລົດໄທເຈົ້າໄປຫາບດິນຈີ່ຜູ້ໜຶ່ງສາມສິບກ້ອນເທື່ອໜຶ່ງໄລຍະ ຫົກ-ເຈັດ ເພິ່ນລັກອອກຈາກຫັ້ນລະກັບຄືນ[93]. ຈຳນວນໜຶ່ງທາງຊຽງຂວາງ,ຈຳນວນໜຶ່ງໄປຊ້ຳເໜືອ, ພວກລຸງສຸບິນ

---

[93] ລຸງສຸບິນໄປຮຽນວັດທະນະທຳ ຢູ່ໂຮງຮຽນພູເທາະຫວຽດນາມຕາມກຳນົດ 7 ປີ ແຕ່ໄປຮອດພໍດີເຮັດເຮືອນ ແລະ ສະໂມສອນແລ້ວ, ສູນກາງໃສ່ໃຫ້ພວກເພິ່ນກັບຄືນປະເທດ ແລະ

ຖືກໄປຊຳເໜືອກອງພົນໃຫຍ່ເພິ່ນສົມທົບກັບກອງພັນທີໜຶ່ງ ເພິ່ນໄປຮອດຊຳເໜືອເຄື່ອງກໍບໍ່ມີ. ພັດຊີຕີບ້ານຫັດບ້ານບາວ, ສຸດທ້າຍໝົດກອງພັນມີແຕ່ພວກລຸງສຸບິນທໍ່ນັ້ນ, ພວກລຸງບິນລອຍນ້ຳມາເດືອນເກົ້າ, ອ້າຍຊິວ່າອີ່ສັງນ້ຳໂຕນພູສິບເກົ້າຄືນເທົ່ານັ້ນຕີບ້ານຫັດ, ບ້ານບາວ, ແລ້ວພວກເພິ່ນໄປຕີເມືອງແອດ, ເມືອງຊຽງຄໍ້ຫັ້ນ, ພວກເພິ່ນຕີຊຽງຄໍ້ຫັ້ນແລ້ວກໍກັບຄືນຕີສິບຊານ, ພວກເພິ່ນຕີສິບຊານແລ້ວຈຶ່ງຕີເມືອງແອດ, ແລ້ວຈຶ່ງຄ່ອຍໄປຕີຢູ່ອັນນີ້ໜອງຄ້າງ. ໜອງຄ້າງນີ້ໄຄແນ່ຄືນອັນນັ້ນ ທ່ານກິນົມ ພົນເສນາ ຍັງຢູ່ຫັ້ນເດ. ສໍານີ້ສໍາລິດຫັ້ນແຫລະລາວກໍຈັບປືນ, ພວກລຸງສຸບິນກໍຈັບປືນ, ໜາວແບບນີ້ກໍບໍ່ໄດ້ເກາະປືນ, ຢູ່ຊື່ໆແລ້ວບາດນີ້ສູ່ຄົນສູ່ເບິ່ງກັນ, ຊິຍິງກໍບໍ່ໄດ້ໝົດຊຳເໜືອລະແມ່ນໜອງທ້າງນີ້ແລ້ວເລື່ອງໜາວເດືອນສີ່ນີ້ [94] , ເດືອນຫ້າກໍຍັງເຫັນຂີ້ຕົມພຽງນີ້ ບ່ອນນັ້ນ, ບ່ອນອື່ນກໍໄຄແດ່, ໜອງທ້າງນີ້ອຸ້ຍ! ພວກເພິ່ນຈຶ່ງຕີຊຳເໜືອບາດນີ້, ຕີຊຳເໜືອແລ້ວຫາກບໍ່ທັນສຳເລັດລຸງສຸບິນຖືກເຈັບກ່ອນ, ເພິ່ນເມືອປົວຢູ່ໂຮງໝໍລ່ອງມາ, ເຂົາເຮັດໂຮງໝໍຢູ່ລ່ອງມາຫັ້ນ, ມີແຕ່ຄົນຫວຽດ ຄົນລາວເຮົາບໍ່ມີດອກ, ມີແຕ່ສີພາຜູ້ດຽວແນວນັ້ນໝູ່ຕີພວກລຸງສຸບິນກັບໝໍຊຽງທັນຈິນໄທ້, ໝູ່ມີຜົນງານພວກລຸງສຸບິນບໍ່ມີ, ມີຈັ່ງໃດພວກເພິ່ນສູ່ຄົນສູ່ຖືກເຈັບ. ແນວນັ້ນພວກເພິ່ນກໍຕີກໍແຕກຈິນສິບປາຍວັນຈຶ່ງພວກເພິ່ນເມືອເມືອງຊຳເໜືອ ແວງໝູ່ເພິ່ນນັ້ນ, ນາທອງນັ້ນ, ເດີນຍິນຫັ້ນພົບຈູອ້າຍສະໝານ, ອ້າຍບຸນລັບ. ເພິ່ນນອນຄິດເຖິງບ່ອນຊິນອນຊິຢູ່ນັ້ນພັກຜ່ອນກ່ອນພໍໄດ້ກິນແບ້ເຂົ້າ. ແບ້ກໍຫຼາຍບໍ່ຫຼາຍ, ສຸດທ້າຍມື້ອື່ນອ້າຍສະໝານວ່າ: ມື້ອື່ນໃຫ້ພວກເຈົ້າກຽມເດີເນື້ອ. ຍ່າງຕີນຮອດບ້ານເລີຍຫັ້ນບ່າ! ເຮີ້ຍລຸງສຸບິນຄົນຕະເລາະຕະແລະ, ໜ້ອຍໜຶ່ງຄືນເຄີຍຢູ່ນຳກັນຜູ້ໃຫຍ່ກໍຢ່າ ບໍ່ໄດ້ວິນລຸງສຸບິນວ່າກະໃຫ້ພັກຈັກສິບວັນຊາວວັນແດ່. ຮ້ວາຍກະເມື່ອຍສູ່ຄົນສູ່ເມື່ອຍແຫລະ ວະກະຍ່າງອີ່ຫຼີຫັ້ນແລະ. ມື້ອື່ນພວກເພິ່ນຍ່າງແຕ່ຊຳເໜືອຮອດບ້ານອີ່ສັງຕີນພູເບື້ອງນີ້. ແຕ່ຫັ້ນພວກເພິ່ນຍ່າງໄປພໍດີຮອດ

ໄປຊ່ວຍກອງແລພວມລັດຖະປະຫານຢູ່ວຽງຈັນ ປີ 1960.

94 ພວກປະຄີແມ່ນພວກຊະເລີຍເສິກຝ່າຍວຽງຈັນທີ່ແນວລາວຮັກຊາດຈັບໄດ້.

ບ້ານກາງທາດ ຈຶ່ງພົບຈຸລຸງໄກສອນນີ້ມາເປີດກອງປະຊຸມເຮັດສະຫຼຸບເຫດການໄຊຊະນະຢູ່ຊຳເໜືອ. ຫວຽດກອງຮ້ອຍໜຶ່ງລາວກອງຮ້ອຍໜຶ່ງ, ພວກລຸງສຸບິນກໍ່ບໍ່ມີຫຍັງໃຫ້ເພິ່ນ, ຜ້າຫົ່ມຜືນໜຶ່ງໃຫ້ລຸງໄກສອນຫັ້ນລະປ່ຽນໝູ່ກິນ, ພວກເພິ່ນຖືຄູ່ຄືນ. ລຸງສຸບິນເອົາຜ້າຫົ່ມ, ຂອງວ່າອ້າຍສະໝານວ່າຜູ້ໃດເອົາຜ້າຫົ່ມນີ້, ແຕ່ບໍ່ແມ່ນຊິໃຊ້ສ່ວນຕົວ, ເຈົ້າຫົ່ມແລ້ວ ເຈົ້າແກ້ອອກ, ຈັກໜ່ອຍໄປຮອດບ້ານປະຊາຊົນບໍ່ມີຫຍັງກິນ ເຈົ້າກໍ່ແກ້ອອກໄປຂາຍກິນ. ອີລຸງສຸບິນ ກໍ່ປະຕິບັດຕາມໂຕນັ້ນ. ແນວເວລາເພິ່ນຢູ່ກາງທາດພົບກັບຈຸນີ້ກໍ່ຖາມເສັ້ນຖອກເສັ້ນທາງລຸງຊົມວ່າພູນີ້ແຫລະເປັນຈັ່ງໃດລູກຫຼານເອີຍ? ເສັ້ນທາງນີ້ບໍ່ມີຫຍັງກໍ່ສະດວກດີບໍ, ມີປະຕິບໍ່ອຶດດອກລຸງສຸບິນວ່າ, ປະຕິມີຄູ່ບ້ານຂອງມັນກອງພັນ. ວັນທີສີ່ມາປ່ຽນ, ພວກລຸງສຸບິນເຂົ້າຮ່ວມວັນທີສີ່, ອັນນັ້ນພັນໄທບົວທອງ ເຂົາມາຄືນທໍ່ໃດ ເຈັດ-ແປດກອງພັນພຸ້ນ, ຈົນຢູ່ຊຳເໜືອບໍ່ມີໃຜຈັບບໍ່ມີໃຜຜູກຊັ້ນດອກ, ມີແຕ່ຈຸເອງເອົາເຂົ້າກິນຈຸສະເລີຍເສິກຫັ້ນສິບເຈັດ ຫ້າສິບແປດພັນຄືນ, ທັງກອງຫຼອນອີ່ສັງປົກຄອງບ້ານກໍ່ມາຫັ້ນ. ພວກເຈົ້າຢ່າໜີ, ພວກເຈົ້າໜີພວກເຈົ້າຕາຍ, ຢູ່ນີ້ເຂົ້າກໍ່ກິນແນວນັ້ນ, ພໍດີລຸງສຸບິນກໍ່ຢູ່, ຢູ່ແລ້ວຈັ່ງເຮັດບັດໃຫ້ເຂົາແຕ່ລະຄົນເມືອເອງແນວນັ້ນພວກລຸງສຸບິນເຮັດຫັ້ນ. ອອກຈາກຫັ້ນລະເພິ່ນດຳເນີນເລີຍທາງນີ້ກໍ່ຕີໄປຮອດພຸ້ນລະ ພວກເພິ່ນກັບຄືນທາງຊຳເໜືອຮອດບ້ານເລີຍ, ຮອດຊຽງລວງ, ແຕ່ຊຽງລວງພວກລຸງສຸບິນຍ່າງໝົດເຮື່ອໝົດແຮງ, ຜູ້ອື່ນໜັກໝົດ. ບາດນີ້ພວກເພິ່ນໄປຮອດກາງທາດຈັ່ງຮອດບ້ານເລີຍ, ບ້ານເລີຍລະຈັ່ງມອບປືນໃຫ້ອ້າຍນ້ອງເພື່ອນ. ອັນນັ້ນຊິເຂົ້າເຂດເຂົາ, ເຂົາບໍ່ໃຫ້ຖືເດ, ມອບໝົດສິດເຂົາ. ລຸງສຸບິນໄປ, ຍ່າງຮອດ ນາແມວຫັ້ນ, ແຕ່ນາແມວ ເພິ່ນຂີ່ລົດ, ບາດນີ້ ເພິ່ນຮອດແກ້ງລົວ ບ່ອນສຳນັກບ່ອນສະຖານີວິທະຍຸກະຈາຍສຽງຂອງຝ່າຍພວກເຮົາຢູ່. ໝູ່ເພິ່ນວ່າຢາກເມືອລາວ, ເມືອກໍ່ເມືອນຳກັນ, ເຈະເອົາ, ເມື່ອແຕ່ໂຕບໍ່ໄດ້. ຕ່ອຍມື້ອື່ນພວກລຸງສຸບິນຕື່ນແຕ່ເຊົ້າ ຂີ່ລົດແຕ່ຫັ້ນຮອດໂມແຊນ, ໂມແຊນ, ນາໂນນີ້ພັກ. ລຸກຈາກຫັ້ນອີກພວກເພິ່ນຕື່ນຕອນເຊົ້າມື້ອື່ນມື້ຮືອີກຮອດບ້ານຕາກາພວກເພິ່ນຈັ່ງຂີ່ລົດເລີຍຮອດໜອງແຮດ, ພວກເພິ່ນຢູ່ໜອງແຮດເຂົ້າຊິກິນກໍ່ບໍ່

ມີ. ອັນນັ້ນພວກລຸງສຸບິນຕີໜອງແຮດ, ແຕ່ມັນເລີກ, ສອງເດືອນປາຍພວກເພິ່ນຕີໜອງແຮດ, ບໍ່ແມ່ນງ່າຍຂອງພວກມັນຢູ່ສູງ,ພວກລຸງສຸບິນຢູ່ຕ່ຳ. ທຳອິດພວກເພິ່ນຢູ່ສູງ, ສຸດທ້າຍຄືວ່າຫັ້ນແຫລະແນວໝວດກໍ່ລົງບ້ານ, ໝູ່ກໍ່ລົງບ້ານ, ນາຍຮ້ອຍກໍ່ລົງບ້ານ. ສັດຕູມາມັນກໍ່ທຸບຕີ, ທະຫານອັນຈຸກອງແສງດາວຈາກອັດຕະປືມາມັນຍຶດໝົດ. ພູສູງອັນນັ້ນ 9 ປອມສູງຫັ້ນ, ໂອ໊ຍ! ຢາກຕີພວກລຸງສຸບິນບໍ່ມີບ່ອນຈັ້ງ, ພວກເພິ່ນຕີອ້ອມຢູ່ຫັ້ນ. ພວກເພິ່ນຕີໂຕນັ້ນແລ້ວຕີບ້ານດ່ານ, ບ້ານດ່ານເມືອງຄຳ, ພວກເພິ່ນວ່າຊິຕີບ້ານດ່ານ ສຸດທ້າຍໂລດສືບໄປສືບມາຂອງພວກໜີຫັ້ນເດຈຸມາແຕ່ວຽງຈັນນັ້ນ, ມັນໂລດເອົາປືນ 150 ນີ້ຍິງຂະໜາດແຕ່ພຸ້ນເກືອບລຸງສຸບິນກະມະ. ພວກເພິ່ນມານອນຕາມທາງເລີຍບໍ່ໄດ້ຕີ, ສຸດທ້າຍຈັບໄດ້ແຕ່ຄົນ, ຈັບໄດ້ຍົນຄັນໜຶ່ງອັນນັ້ນຍົນອີ່ສັງເຂົາເອີ້ນວ່າ ຍົນອານສອງຫັ້ນນ່າປີກຊ້ອນຫັ້ນກໍ່ມີແຕ່ພວກລຸງສຸບິນຫັ້ນແຫລະຈັບມັນຕາຍ [95] . ອ້າຍສະໝານບໍ່ໃຫ້ຍິງມັນລົງຕອນແລງ, ພວກລຸງສຸບິນກໍ່ຮ້ອງຍຕິສາຍໃຫ້ກັນໄປສິ່ງຕາມໜຶ່ງຫັ້ນ. ຕອນເຊົ້າມັນໂລດມາສັ່ງຢາຫັ້ນ, ຄົນຝຣັ່ງຫັ້ນຂັບຍົນຫັ້ນ. ບາດຂັບເອົາເຫຼັກໝາກຈັບນີ້ແຫລະມັດຍົນຫັ້ນຈັບຍົນແລ້ວ ຊື່ສຽງມີລະເດ. ຢູ່ຄາວດຽວຈັກໜ່ອຍແປດໂມງເກົ້າໂມງ ລົດມາແຕ່ທົ່ງໄຫຫີນມາເອົາພວກລຸງສຸບິນກໍ່ເປັນກອງພັນໄປເອົາ. ບາດນີ້ອ້າຍນ້ອງເພື່ອນບໍ່ເວົ້າແຫລເຂົານີ້ບີແປດນີ້ແຫລະ ລົງຢູ່ບ້ານຕາກ້າຫັ້ນ. ມີແຕ່ຍາດກັນໂດດຈ້ອງເລີຍທົ່ງໄຫຫີນ. ຜູ້ມາແຕ່ຫວຽດນາມ, ມາແຕ່ພຸ້ນກໍ່ໂດດເລີຍຈຸອ້າຍກັນ, ອ້າຍກັນວິລະຊົນຫັ້ນ, ແຕ່ຫັ້ນລະສະມິວມະມົ້ນເລີຍນາ, ຄືຍາພົງເວົ້າຫັ້ນໄປຮອດລະຕີບ່ອນນີ້ຕີບ່ອນນັ້ນ, ລະບໍ່ໄດ້ພັກ, ຮອດໂສ້ງເສື້ອຊິນຸ່ງກໍ່ບໍ່ມີ. ພວກເພິ່ນກໍບໍ່ນຸ່ງ, ຕີບ້ານພາພວກເພິ່ນກໍ່ໄດ້ໂສ້ງເສື້ອສາງໜຶ່ງ. ສິ້ງເສື້ອລາຍຫັ້ນນຸ່ງ, ນຸ່ງບາດນີ້ຄົບພວກເພິ່ນ 280 ຄົນ, ນຸ່ງແລ້ວນີ້ລຸງສຸບິນເມືອສະເໜີໃຫ້ລຸງສິງກະໂປ. ໄລຍະນັ້ນລຸງສິງກະໂປເດພໍ່ຍິກເດເປັນຫົວໜ້າ. ລຸງພູນຫັ້ນດ້ານການເມືອງ, ອ້າຍຈຳນຽນ

95 ຍົນອານສອງແມ່ນຍົນໄຊວຽດ ມາຊ່ວຍກຳລັງເປັນກາງ, ແຕ່ຝ່າຍວຽງຈັນຍຶດໄດ້, ຮັບໃຊ້ຝ່າຍວຽງຈັນ, ສຸດທ້າຍແນວລາວຮັກຊາດຍຶດໄດ້.

ລາວຢູ່ເສນານີ້, ໄລຍະນັ້ນລຸງສຸບິນສະເໜີໃຫ້ລຸງສິງກະໂປເພີ່ນວ່າໄປ, ລຸງສິງກະໂປກໍ່ຖາມລຸງສຸບິນເບິ່ງສິ້ງເສື້ອ, ເອົາສິ້ງເສື້ອພວກເພີ່ນບໍ່ມີຝາກຢູ່ທາງການ, ອ້າຍສະ ໝານກັບອ້າຍກີບິນກໍ່ຈັກແນວໃດຖືກເລກິນໝູ່, ໃຜກໍ່ວ່າເຮົາຢູ່ກອງພັນຊາວສີ່ເດີ, ບໍ່ຈັກຫວງດບໍ່ຈັກລາວຝາກເຄື່ອງຢູ່ຫັ້ນໝົດ, ໝວດລຸງສຸບິນໄປຕີບ້ານທ່າ. ທາງອ້າຍເຊີນວ່າກອງພັນຫັ້ນບໍ່ໃຫ້ຖືກອັນອື່ນ, ໃຫ້ຖືແຕ່ຄຸກັບຊ້ວານທໍ່ນັ້ນກັບເຂົ້າກິນ, ຜ້າຫົ່ມຫັ້ນຝາກໝົດລຸງສຸບິນວ່າໂອ້ ເຮັດແນວໃດສິ້ງເສື້ອຊິນຸ່ງກໍ່ບໍ່ມີ, ອັນນີ້ທີກເດືອນແລ້ວສິ້ງເສື້ອກໍ່ຂາດແລ້ວ. ເມື່ອແນວນັ້ນລຸງສິງກະໂປວ່າ ສັງເຈົ້ານຸ່ງແນວນີ້, ລຸງສຸບິນວ່າແນວບໍ່ມີເພີ່ນວ່າ ກໍ່ຕອບແບບນັ້ນແຫລ້ວ, ບໍ່ແມ່ນເພີ່ນພາໂລພາງານຂັ້ນເທິງຂັ້ນສູງ, ເພີ່ນກໍ່ໄປເບິ່ງແມ່ລຸງສຸບິນຖ້າຢູ່ຖ້ຳກາດກັບອ້າຍຈຳນຽນແລະອ້າຍກີ, ຂອງອ້າຍຈຳນຽນ, ລຸງສະໝານ, ລຸງສະໝານການເມືອງ, ອ້າຍຈຳນຽນການທະຫານ. ດ້ານລົບຢູ່ຖ້ຳກາດຊຽງຂວາງເດ. ພວກລຸງສຸບິນຢູ່ນາໄສກອງພັນໜຶ່ງເພີ່ນວ່າແນວນັ້ນ, ເລີຍສຸດທ້າຍພວກນັ້ນເອົາໄປໝົດເຄື່ອງພວກລຸງສຸບິນ. ພາລາໄປກວດກໍ່ບໍ່ມີອີ່ຫຼີ, ທະຫານນີ້ນອນອຶກລຶກອາກ ລາກ, ໄຄແນ່ມີຈ້ອງ. ຈ້ອງພວກລຸງສຸບິນກໍ່ເອົາຜູ້ລະດາງກັບຜ້າຫົ່ມຫັ້ນເລີຍ, ພວກລຸງສຸບິນພາກັນຕີສັດຕູ, ຕີໄປຕີມາຕີໄປຕີມາ, ຕີຮອດພຸ້ນຮອດປ່າດົງພວກເພີ່ນບໍ່ໄດ້ພັກບໍ່ໄດ້ເຊົາຕີ, ຕີແລ້ວໝູ່ວ່າເມືອພັກ. ສຸດທ້າຍຈັດກອງລຳລຽງອີກ, ເປັນຜູ້ລຳລຽງກອງພັນຂອງພວກລຸງສຸບິນ. ແນວນັ້ນກອງລຳລຽງລະບາດນີ້ຈຳເປັນລູກ 120 ນີ້ຊິແບກຫີບໜຶ່ງ 2 ລູກສອງຄົນຫາມບໍ່ໄດ້, ແບກຕັ້ງຫີບເລີຍໜັກລູກ 120. ພວກເພີ່ນໄປຕີເລີຍຕີໄປຕີມາ. ຮອດປີ 62, ລະພວກລຸງສຸບິນໄປປະຈຳຢູ່ຊຽງຂວາງຈັ່ງກັບຄືນເທື່ອທີ 2 ອີກປະຈຳຢູ່ຫັ້ນ, ພວກເພີ່ນເຄື່ອນໄຫວຮອດທ່າຫອງທ່າໂທມ. ຕີທ່າໂທມກໍ່ສາມເທື່ອຕີ. ເທື່ອໜຶ່ງລະແມ່ນເທື່ອນາຍພົນສົມສັກນິຕິ, ຕອນນັ້ນອ້າຍນ້ອງຖືກບາດເຈັບອ້າຍນ້ອງເສຍເຂົາກໍ່ບໍ່ເຫັນ, ຈຳເປັນພວກລຸງສຸບິນຕີເທື່ອທີສອງ, ໄທລຸງສຸບິນຈັ່ງເອົາຄົນເຈັບຫັ້ນຄົນຕາຍບໍ່ເວົ້າມັນເນາະລະ, ມີແຕ່ຄົນເຈັບຢູ່ຕີນພູຫັ້ນພວກລຸງສຸບິນເອົາໄດ້. ເທື່ອທີສາມພວກລຸງສຸບິນຈຶ່ງຕີແຕກ, ຂອງກາງເວັ້ນມັນ

ຕັ້ງຢູ່ບ້ານເດ, ກາງຄືນມັນຕັ້ງຢູ່ປ້ອມພູ, ມັນຢູ່ປ້ອມພູສາມປອມ, ພວກລຸງສຸບິນກໍ່ຈີນປະຖິ້ມຄ້າງແປດສິບເອັດ, ມັນຍິງອາແອັມກໍາແຕກລິດອີ່ຊຸຊຸກໍ່ແຕກມັນເອົາເບີສະກາໄປໃສ່ຈີນບໍ່ຮອດລົດພວກເພິ່ນກໍ່ດາຍ, ເທື່ອທີສາມພວກລຸງສຸບິນຈັ່ງຕີແຕກ. ແຕກລະພວກເພິ່ນຄິດວ່າຊິກິນເຂົ້າ, ເຂົ້າກໍ່ບໍ່ມີພວກເພິ່ນຈໍາເປັນແກ່ວງສາຍໃຫ້ສູນກາງມາສົ່ງ. ສູນກາງມາສົ່ງເຈັດຄັນຍົນ, ຫ້າຄັນລະແມ່ນສົ່ງເຂົ້າ, ສອງຄັນລະແມ່ນຂອງກິນພວກລຸງສຸບິນ ໂອ້ຍ! ດີໃຈແທ້ລະໃຜກໍ່ດີໃຈກິນ, ກິນພໍດີເກົ້າໂມງກາງຄືນມີຄໍາສັ່ງວ່າດຽວນີ້ກອງພັນຊາວສີ່ລະແມ່ນໃຫ້ເຄື່ອນໄຫວເມືອມືດບ່ອນໃດນອນບ່ອນຫັ້ນ,ເມືອຕີທ່າໂທມ,ເອົາຕີບ້ານກ້າ. ພວກລຸງສຸບິນໄປບໍ່ວ່າ ຫວຽດນາມວ່າລາວໃດຫວຽດກໍໃຫ້ອຶກກະທຶກ, ແນວເດືອນມັນມືດດີບໍ່ດີຊ້າງມາ ເຕະເຄື່ອງເຕະຂອງລຸງສຸບິນອຶກກະທຶກ.ນັ້ນແຫລ້ວປະຫວັດ ທ່າຖອກທ່າໂທມປິດປ່ອຍໝົດ, ເອີບາດນີ້ທາງນີ້ພວກເພິ່ນປົດປ່ອຍຮອດນ້ຳລິງ, ປົດປ່ອຍແລ້ວສຸດທ້າຍພວກເພິ່ນມາປະຈໍາຫັ້ນ. ມັນມາອີກພວກລຸງສຸບິນໄດ້ຍຶດປ້ອມພູຢູ່ເໜືອຄອນສະຫວັດແປະພູກໍ່ເສັ້ນທາງໄປເມືອງຕັນຫັ້ນ. ບາດພູສີມັນຍຶດຢູ່ຫັ້ນ. ຫຼັງຈາກຫັ້ນ ພວກລຸງສຸບິນຢູ່ລະພໍດີ ລຸງສຸບິນຖືກເສຍອົງຄະເລີຍວັນທີສອງເດືອນໜຶ່ງ, ປີຫົກສິບສີ່ເວົ້າຈິງແທ້, ບາດນີ້ເພິ່ນໄດ້ເຈັບໜັກໜັກສິບສອງເທື່ອ, ເພິ່ນຖືກບາດເຈັບສະເພາະຢູ່ໜອງແຮດແມ່ນຫົກເທື່ອ, ຢູ່ໃນຄີງແມ່ນຍັງມີລູກປືນເພິ່ນວ່າ: ນີ້ລະແກັບມັນແທ້ ອັນນີ້ກໍ່ຍັງນີ້ໂຕດໍາໆ ແທ້ບຸນບໍ່ຕາຍນາ! ຫຼັງຈາກເພິ່ນເສຍອົງຄະແລ້ວ ເພິ່ນລົງເມືອປົວຢູ່ຫວຽດນາມປີຫົກສິບສີ່, ວັນທີສອງ ເດືອນໜຶ່ງ ຫົກສິບສີ່ ປົວຢູ່ໂຮງໝໍຮ້ອຍແປດ. ບັດນີ້ຮອດປີຫົກສິບຫ້າ ວັນທີສອງ ປີຫົກສິບຫ້ານີ້ ຄໍາສັ່ງໄລະຍະນັ້ນອ້າຍບຸນຍັງຫ້ອງການເກົ້າສິບແປດ ຢູ່ຮ່າໂນ້ຍເດເພິ່ນຄໍາສັ່ງວ່າ ຂອງຢູ່ຊຽງຂວາງເຮືອນລຸງສຸພາກໍ່ໝົດແລ້ວ, ເຮືອນຫ້າຫຼັງຍິນເຮັດແລ້ວ, ແຕ່ເຮືອນເພິ່ນຫັ້ນກັບເຮືອນສຸວັນນະພົມມາກໍ່ໝົດແລ້ວຍິນເຮັດ[96] . ອ້າຍບຸນຍັງວ່າຜູ້ໃດໄດ້ໄປເປັນທະຫານໃຫ້ເມືອງຫ້ອງ

---

96 ສູນກາງຂອງກໍາລັງຮັກຊາດເຈລະຈານັ້ນແມ່ນຕັ້ງຢູ່ຄັງໄຂ-ຊຽງຂວາງ.

ຖິ່ນໃຜທ້ອງຖິ່ນມັນ. ຈໍາເປັນຜູ້ທີ່ລຸກບໍ່ໄດ້ໄປບໍ່ເປັນລະແມ່ນເມືອຊໍາເໜືອ. ຊັ້ນກໍ່ເອີ້ນກອງເສຍອົງຄະ, ແຕ່ພວກເພິ່ນເມືອທາງນີ້ສອງຄົນພວກເພິ່ນເມືອ, ລຸງສຸບິນຢາກເບິ່ງພໍ່ແມ່ຄິດວ່າພໍ່ຍັງ ສຸດທ້າຍພໍ່ເພິ່ນເສຍແລ້ວ. ລຸງສຸບິນເມືອຮອດແຂວງນີ້ເພິ່ນກໍ່ຮູ້ຢູ່ດອກ, ຈັດຕັ້ງແຂວງເພິ່ນໃຫ້ຢູ່ນໍາປ້າບຸນຫຼ້າ. ລຸງສຸບິນວ່າເຮົາຢູ່ບໍ່ໄດ້ ໃຫ້ເຮັດວຽກຢູ່ການເມືອງຝ່າຍປົກຄອງ ພໍດີແຂວງຍັດໃຫ້ໄປເຮັດວຽກພາລາທິການປະຈໍາຢູ່ອະທິງນີ້ແຫລະ. ແຕ່ວ່າບໍ່ຄືດຽວນີ້ ເພິ່ນເປັນໄຊປ່ອຍໄລຍະນັ້ນ, ເຖິງວ່າເພິ່ນເສຍອົງຄະ ກໍ່ຍັງທັນໜ້ອຍໜຶ່ງ, ນໍາພາການສູ້ຮົບຕີບຕີຄືວ່າເຮົາເຮັດຢູ່ບ້ານຕະແຫຼ່ງ. ເພິ່ນຍັງນໍາພາອ້າຍນ້ອງໝູ່ເພື່ອນໄດ້. ແຕ່ທັ້ນແປດສິບເກົ້າເພິ່ນລະອອກບໍານານ.

ບັດນີ້ຜົນງານຕົວຈິງໄລຍະທີ່ລຸງສຸບິນເຮັດວຽກທັ້ນ, ແຕ່ວ່າພັບຂອງເພິ່ນນີ້ລູກກໍ່ເອົາໄປ. ຜົນງານຂອງເພິ່ນຕົວຈິງທີ່ເຮັດຜ່ານມານີ້: ໜຶ່ງລະແມ່ນການສູ້ຮົບນີ້ມີ 111(ໜຶ່ງຮ້ອຍສິບເອັດ) ເທື່ອ. ນັບແຕ່ທັ້ນຈົນຮອດປີເຈັດສິບສາມນີ້ເພິ່ນຢູ່ຕະແຫຼ່ງນັ້ນ. ບາດນີ້ໃບຍ້ອງຍໍຂອງເພິ່ນທີກສິບໃບອັນນັ້ນຜົນງານຕົວຈິງ, ອັນສອງຫຼຽນໄຊ. ອີງຕາມພັກຕາມລັດທັ້ນແລ້ວ ເຂົາປະດັບໃຫ້ລຸງສຸບິນພຽງໃດກໍ່ເອົາພຽງນັ້ນແລ້ວ, ແນວນັ້ນອັນນີ້. ເຖິງເພິ່ນເສຍອົງຄະວະຊິງນີ້ເພິ່ນບໍ່ທັນໄດ້ພັກ ຖາມອັນນີ້ເດບໍ່ໄດ້ພັກບໍ່ໄດ້ເມືອບ້ານ, ເຖິງຫ້າວັນເມືອບ້ານເພິ່ນບໍ່ໄດ້ພັກ, ມີແຕ່ວຽກກັບວຽກ, ເພິ່ນເຮັດຈົນຊິລື້ມຊິຕາຍ, ຈົນພວກເພິ່ນເຈັບນາເວົ້າຄວາມຊື່ນີ້ແຫລະ ຈົນພວກເພິ່ນລຸກບໍ່ໄດ້ໄປບໍ່ເປັນລະດຽວນີ້ ຈັ່ງໃຫ້ຢູ່ໄປໄທວບໍ, ແຕ່ກ່ອນຕີທ້າເມືອງນໍເພິ່ນໄປໝົດຮອດກະລືມ, ດາກຈຶ່ງ, ສະໜາມໄຊ, ເຊກອງເໜືອ, ເຊກອງໃຕ້ນີ້ ເມືອງອັນນີ້ໄປໝົດເພິ່ນເຮັດວຽກການເມືອງກໍ່ເຮັດ, ວຽກການທະຫານເພິ່ນກໍ່ເຮັດວຽກການປົກຄອງເພິ່ນບໍ່ໄດ້ພັກບໍ່ໄດ້ເຊົາເລື່ອງວຽກເລື່ອງງານ. ເພິ່ນຢາກສະເໜີຄືກັນແນວນັ້ນເລື່ອງມັນແຕ່ວ່າເລື່ອງອື່ນໆເພິ່ນບໍ່ວ່າ, ແຕ່ໂຕນັ້ນເລື່ອງມັນມີແຕ່ວຽກງານຈົນລຸກບໍ່ໄດ້ໄປບໍ່ເປັນທັ້ນແລ້ວ. ແນວນັ້ນແຫລະເລື່ອງມັນ.

ເລື່ອງຝຣັ່ງນີ້ລຸງສຸບິນບໍ່ໄດ້ຕີ, ເພິ່ນບໍ່ຕີວະ, ມີແຕ່ເພິ່ນສົ່ງເຂົ້າໃຫ້ອ້າຍນ້ອງເພື່ອນນີ້, ອ້າຍນ້ອງເພື່ອນເປັນຜູ້ຕີພວກລຸງສຸບິນເປັນຜູ້ສົ່ງເຂົ້າ, ພວກພໍ່ເພິ່ນນີ້ແມ່ເພິ່ນຕາຍແຫລະ, ພໍ່ເພິ່ນເຊົາບາດນີ້ເພິ່ນເຮັດອີກ, ສົ່ງເຂົ້າສົ່ງນ້ຳ, ຕີບໍ່ໄດ້ຕີ, ເພິ່ນມີແຕ່ໄປນຳອ້າຍນ້ອງເພື່ອນຕີອັດຕະປືນີ້. ຫວງດວ່າຊິຕີນຳເຂົາບໍ່ມີປືນ, ເພິ່ນຍິງປືນກໍ່ຍັງບໍ່ເປັນ. ເວລານັ້ນອາຍຸເພິ່ນຈັກທໍ່ໃດແຫລ້ວ ບໍ່ໄດ້ຮິບເພິ່ນເກີດປີ 1930. ໂອ້ຍກໍ່ວ່າຢູ່ຢຸດຮິບ,ຢຸດຮິບກໍ່ແມ່ນປີຫ້າສິ່. ປີຫ້າສິບກໍ່ຂຶ້ນເຕົ້າໂຮມແຫລ້ວຍັງວ່າ.

ປີຫ້າສິບສີ່ ເພິ່ນຂຶ້ນເຕົ້າໂຮມສອງແຂວງໃນເວລານັ້ນ ເຕົ້າໂຮມຫັ້ນຮັກສາສອງແຂວງຊຳເໜືອ, ຜົ້ງສາລີກັບດານກວ່າໝູ່. ໂອ້ອັນນີ້ລະແມ່ນຢູ່ນານອງນີ້ກັບຢູ່ພູກຳໄຮນີ້ ປີຫ້າສິບຫົກນີ້ກັນດານແທ້, ຈົນບໍ່ມີເຂົ້າກິນ ພວກລຸງສຸບິນຢູ່ເພາະມັນປ່ງວເດ, ທາງປະຊາຊົນພຸ້ນ, ກາຍບ້ານລະມີບ້ານສະເລີຍນີ້ ອັນນີ້ບ້ານສະເລີຍ, ອັນນີ້ລ້ານສະລານີ້, ເສັ້ນທາງເຂົາຂຶ້ນພູສູງພູຫຼວງນີ້ລົງພູກຳໄຮນີ້ມັນຫຍຸ້ງ ຍາກກວ່າໝູ່ແລ້ວ.

ຢູ່ບ່ອນນັ້ນ ເພິ່ນບໍ່ໄດ້ຕີຢູ່ຫັ້ນບໍ່ໄດ້ຕີດອກ ເວົ້າລວມຢູ່ສອງແຂວງນີ້ໜ້ອຍໜັກໜ້ອຍໜາພວກເພິ່ນຕີ. ກອງພັນພວກລຸງສຸບິນຕີໜອງຢຶດນີ້ກອງຮ້ອຍໜຶ່ງຕີ, ນານອງນີ້ກອງພວກລຸງສຸບິນຕີ, ກອງຮ້ອຍສີ່ກັບກອງຮ້ອຍສາມທໍ່ນັ້ນ, ນອກນັ້ນນີ້ໝູ່ບໍ່ໃຫ້ຕີ, ມີແຕ່ຝັງໝາກມິນໄປຮອດເມືອງເປີນ ໄປຮອດດາດເນີນນີ້[97] ພວກລຸງສຸບິນຕັດຫຼັງພວກສັດຕູໄປຝັງໝາກມິນ, ໄປສືບໄປສວນອັນນີ້ອັນນັ້ນຫັ້ນຄືອີ່ສັງຜີວວີລຳຫັ້ນ. ຂໍອະໄພນຳອັນນີ້ຊື່ເກົ່າແມ່ນລູເດຫັ້ນ ໄປຈູດໝາກຟອງໃສ່ສາງມັນຢູ່ແນວນັ້ນເຂົາບໍ່ໃຫ້ຕີເດັດຂາດ, ມີແຕ່ໄປສືບບ່ອນນີ້ໄປສືບບ່ອນຫັ້ນ,ໄປຝັງໝາກມິນໄປສືບ, ດຽວນີ້ ສີປະເສີດບໍ່ທັນຕາຍຢູ່ເມືອງນີ້, ລຸງສຸບິນກັບບຸນລ້ອມນີ້, ບຸນໂລມນີ້, ນ້ອງອ້າຍໜ້າວນີ້ຝັງຢູ່ນີ້. ສີປະເສີດໄປຄວັດວ່າພວກລຸງສຸບິນຝັງບໍ່ເປັນ, ຝັງບ່ອນນີ້ອີກໄປຄົວດ, ລຸງສຸບິນວ່າ: ໂຢ່!

---

[97] ດຣາກເນີນພາສາຕະລ່ຽງ, ແປວ່ານ້ຳເນີນຊາຍແດນລະຫວ່າງແຂວງຊຽງຂວາງແລະຊຳເໜືອປະຈຸບັນ

ເຈົ້າຮຽນຈັກປີຫວະ, ຂ້ອຍກໍ່ຮຽນຢູ່ໂຮງຮຽນກິນມະດາໃດ ຈັກໜ່ອຍເຮົາຟັງໃຫ້ເຈົ້າລະວັງໃດ, ເພິ່ນວ່າກໍ່ຍາກໄດ້ພົບງານຄືກັນລະຕິ, ສັດຕູລົມສາວຢູ່ເຮືອນ, ພວກລຸງສຸບິນຊິໄປຍິງເຂົາກໍ່ບໍ່ໃຫ້ແນວນັ້ນຂອງສະໄໝນັ້ນເຂົາບໍ່ໃຫ້ຕີ, ພວກລຸງສຸບິນຊິເອົາການເມືອງເດ. ສຸດທ້າຍກະປີຫ້າຫົກສິບ ມັນກໍ່ເອີ້ນວ່າສັນຕິພາບແລ້ວລະຢູ່ບາດນີ້ແນວນັ້ນຈິນມາຮອດລົງເຈລະຈາ, ຈິນລຸງໄກສອນຕຳນິຫັ້ນແລະ, ບໍ່ຕຳນິຈັ່ງໃດຂອງວ່າຂັ້ນທີໜຶ່ງເທື່ອທີໜຶ່ງກໍ່ລຸງສຸບິນ ບຸນໂລມ, ສີປະເສີດໄປເຈລະຈາກັບທະຫານສັດຕູຢູ່ໃນບ້ານນາສາມ, ອັນນັ້ນເທື່ອທີສອງນີ້ອ້າຍອຸ່ນດຽວນີ້ອ້າຍອຸ່ນຕາຍແລ້ວນາຍຮ້ອຍນີ້ແມ່ນອ້າຍອຸ່ນໄປ. ນອກນັ້ນພວກລຸງສຸບິນນີ້ສາມສິບຄົນ ເຈລະຈສນຳກັນລູກປືນເຈົ້າຕົກໃສ່ພວກເຮົາລູກໜຶ່ງລົງປັບໃໝພວກເຈົ້າໂລດ, ລູກປືນພວກເຮົາຕົກໃສ່ພວກເຈົ້າ, ພວກເຈົ້າກໍ່ປັບໃໝ.

ສັນຍາກັບສັດຕູຫັ້ນແລ້ວ ບໍ່ໃຫ້ຍິງເດັດຂາດ, ບັກຄຳຜາຍແລະມັນບໍ່ດີຄຳຜາຍໃນໝວດມະຫາຍົກວ່າ ຄຳຜາຍຮ້ອຍເອກ, ລຸງສຸບິນໄປລວມກັນປະຊຸມກັນຢູ່ປົດນານອງ, ສຸດທ້າຍລະໄດ້ໂດຍຮ້ອຍໂທ. ນັ້ນຢູ່ປົດນານອງ ຄົນຊຳໃຕ້ອາວນັ້ນຄົນເມືອງໂສ້ຍ ພາພວກເພິ່ນຮ້ອຍໂທມະຫາຍົກ ເຈົ້າແມ່ນຮ້ອຍເອກກັບເພື່ອງ ຜູ້ຕາຍຢູ່ດົງລາດຫັ້ນກໍ່ຮ້ອຍໂທ. ລຸງສຸບິນກໍ່ຮ້ອຍຕີ, ສຸດທ້າຍໄປໂດຍຮ້ອຍໂທ. ເມື່ອຮອດເຮືອນບັກເພື່ອງວ່າມຶງເດີ ກູຊິຂ້າມຶງຖິ້ມເຮັດເສຍກຽດເຮົາແນວໃດບໍ່ຟັງແມ່ນບໍ, ເຈົ້າຢ້ານແມ່ນບໍສັດຕູ? ລຸງສຸບິນວ່າ: "ຮ້ວາຍກໍ່ຢ້ານແມ່ແຫລ້ວ,ຢ້ານແລ້ວວ່າໃຜກ້າຫານໄປໃຜບໍ່ກ້າໄປລະຢ່າໄປ. ເພິ່ນໄປເພາະວ່າເພິ່ນນີ້ມັນໂສຕາຍແລ້ວເພິ່ນໄປເຈລະຈາກັບເຂົາ".

ຂອງແຜນການລຸງສຸບິນຢູ່ຫ້ວຍເທົ່ານັ້ນ ກໍ່ອ້າຍພໍ່ອ້າຍພົມຫັ້ນນາຍໝູ່, ສອງສາມເທື່ອ ມາເຈລະຈານຳກັນບໍ່ໃຫ້ຍິງກັນແຫລະ, ປົດອື່ນກໍ່ຕີກໍ່ຍິງກັນ, ປົດພວກລຸງສຸບິນບໍ່ເດັດຂາດ ແລະ ບໍ່ໃຫ້ເຮັດ.ຮ້ວາຍລຸງສຸບິນເວົ້າກັບຄຳໄພຄຳໄພຍອມບາດນີ້. ຄຳເພື່ອງວ່າໃຫ້ເຈົ້າແນວນີ້ ຂ້ອຍຍົກໃຫ້ເຈົ້າແຫລ້ວ, ໝວດເຮົາຮ້ອຍເອກ, ບໍ່ຈັກຮ້ອຍເອກບໍ່ຈັກຮ້ອຍໂທມັນວ່າລຸງສຸບິນບໍ່ຮູ້, ອີ່ແນວນັ້ນນາເລື່ອງມັນ. ລຸງສຸບິນນີ້ຄວາມທຸກຄວາມຍາກບໍ່ເວົ້າແຫລ້ວຢູ່ໃນຫັ້ນອັນ

ໜຶ່ງ, ອັນສອງແຫລ້ວປີທີກາສິບສອງໝວດລຸງສຸບິນຢູ່ຊຽງຂວາງດ້ວຍຄວາມຫຍຸ້ງຍາກ, ເຂົ້າຊິກິນກໍ່ບໍ່ມີ, ນ້ຳມາກບາດນີ້ເວົ້າອີ່ສັງກໍ່ແຄນແນ່. ລຸງສຸບິນກັບໝໍ້ອັນນັ້ນລອຍ, ສາຍກໍ່ຂາດ, ຮ້ອຍໄທທາກກອງ. ພວກລຸງສຸບິນໄປຫາກອງພັນເອົາເຂົ້າ, ສະເໜີເຂົ້າສາຍຂາດຕໍ່ກັນບໍ່ໄດ້, ຈຳເປັນພວກເພິ່ນລອຍເອົາບໍ່ແມ່ນງ່າຍໆຕັ້ງສອງຫຼັກພຸ້ນຢູ່ຮ່ອງໂຕນັ້ນ, ທາງບ້ານຄອນສະຫວັນ, ດຽວນີ້ທາງບ້ານນາຄຳຕີນພູສຽດນີ້ເລີກບໍ່ເລີກນ້ຳ, ຖືແຕ່ໄມ້ນ້ຳຊັດເມື່ອຍແນວນັ້ນ. ບາດສຸດທ້າຍລະໝວດລຸງສຸບິນຮອດກອງພັນ, ເພິ່ນຂໍກອງພັນວ່າເຮັດຈັ່ງໃດເຮືອກໍ່ບໍ່ມີ, ເອົາລົດຈັ່ງໃດຊິໄປໄດ້, ລົດຊ້າຫັ້ນເດຊິເອົາລົດຊ້າຫັ້ນໄປສິ່ງເຂົ້າ, ພວກລຸງສຸບິນເວົ້າວ່າສັດຕູບຸກນີ້ແມ່ນຕາຍແລ້ວ. ຕອນນັ້ນສີ່ວັນບໍ່ມີເຂົ້າກິນ. ເວົ້າຄືປີທີກາສິບສອງຫັ້ນຄືກັນ, ເວົ້າໂຕບ່ອນສຳຄັນກວ່າໝູ່ຄືຕີທ່າໂທມ, ຕີທ່າໂທມຊິໄປທາງໃດກໍ່ບໍ່ໄດ້ແຫລ້ວຂອງເຂົາ ພວກລຸງສຸບິນນີ້ມັນຂຶ້ນກັບກອງພົນຫລວງດ, ຕີງບໍ່ໄດ້ຈັກດີ້ແຫລ້ວ, ຫລວງດວ່າຊິໄປໃສ, ພວກລຸງສຸບິນເປັນເຈົ້າພາບລະເຮັດວຽກສອງໜ້າທີ່: ໜຶ່ງບັນຊານາຍໝວດ, ສອງເພິ່ນບັນຊາຈຸສືບຂ່າວ, ສືບຂ່າວເຈົ້າໄປຫລວງດກໍ່ບໍ່ຮູ້ທາງ ໜຶ່ງ, ສອງພາສາແປກໍ່ບໍ່ຮູ້ແຖບບ້ານແທກບ້ານນາຍພິນບຸນນຽມ, ບ້ານເຂັກ, ບ້ານຄອກໝູນີ້. ບ້ານທາງນີ້ພວກລຸງສຸບິນໄປເປັນພາສາແປນຳຫລວງດຈຳນຽນບອກໃຫ້ໄປ. ລຸງສຸບິນນີ້ແປພາສາ. ແຕ່ວ່າເພິ່ນຊິຮູ້ຫຼາຍບໍ່, ພໍແຕ່ປາກນຳກັນໄດ້ ວ່າຢູ່ນຳກັນໄດ້ວ່າບໍ່ພໍຊິອຶດເຂົ້າແນວນັ້ນນ່າ ຫຍຸ້ງຍາກນຳໂຕນີ້. ເຂົ້າຢູ່ທ່າໂທມຊິໄປວ່າອີ່ສັງເຂົ້າໜຶມຈີນແຕ່ກ່ອນຫັ້ນຍັງຢູ່ບາໄລຫັ້ນເພິ່ນບໍ່ທານກິນ. ທີກວັນຫັ້ນເພິ່ນອຶດເຂົ້າບໍ່ມີເຂົ້າກິນ,ບາດນີ້ລຸງສຸບິນຕີບໍ່ທັນສິ່ງ, ມີແຕ່ໄປສ້ອນຫັ້ນພໍ. ແຄນແນ່, ພໍໄດ້ປາສ້ອນວັງນ້ອຍໆນີ້ບາດໜຶ່ງຊິໄດ້ແຫລະສໍ່ານີ້, ໄປບັກຕາວຫັ້ນ, ກິກຕາວຫັ້ນກິນເຂົ້າໜົມຢູ່ຖົງ. ເອີຢູ່ບາໄລນີ້ຖົງໜຶ່ງເພິ່ນບໍ່ທານກິນ, ຈັກຊິໃຫ້ໃຜໃຫ້ຫລວງດພັດລາວບໍ່ມີ, ໃຫ້ລາວພັດຫລວງດບໍ່ມີ ເພິ່ນຊິໄປກິນກາງຄືນຄືໝູ່ກໍ່ພັດບໍ່ເປັນໃດເຮີຍ, ບໍ່ແມ່ນມີແຕ່ໂຕເຮັດການປະຕິ ວັດໝູ່ກໍ່ເຮັດຄືກັນ ແນວນັ້ນຄວາມຫຍຸ້ງຍາກລະແມ່ນມີແນວນັ້ນລຸງສຸບິນນີ້. ບັດໝູ່ປະເພິ່ນອີກຄືຢູ່ນານອງຄືກັນ, ລຸງສຸບິນກັບຄຳພອນ, ບ້ານ

ນາເຮີນນີ້, ດຽວນີ້ຈັກລາວຢູ່ໃສລາວເອົາເມຍຊຳເຕື້ ບໍ່ແມ່ນເອົາເມຍນ່າຫາກ ແມ່ຍິງເປັນສິບຂອງມັນເອົາບະຫລອກບະໂລເພິ່ນຢູ່ນາລອງໝູ່ປະລຸງສຸບິນ, ພວກລຸງສຸບິນໄປສືບທາງທ້ອງກໍ່ຢາກ, ບາດນີ້ເພິ່ນໄປຂໍເຂົ້ານຳປະຊາຊົນ, ຂໍເຂົ້າເບິ່ງປາກປືນມັນຢູ່ໃນຫັ້ນ, ປືນໂບໂລນິນຫັ້ນປືນກົນມັນປະຊາຊົນຈີນເຂົ້າໃຫ້ແລ້ວໄປໂຕນລົງນ້ຳ. ໂອ້ເມືອທາງສຳນັກກອງພັນທາງເມືອງຮາມໝູ່ວ່າ ພວກລຸງສຸບິນນີ້ຕາຍໝົດແລ້ວ, ສອງຄືນເພິ່ນຫັ້ນຫຍຸ້ງຍາກມັນເປັນແນວນັ້ນ. ແຕ່ວ່າເລົ່າສະໄໝຝຣັ່ງນີ້ເວົ້າລວມເພິ່ນບໍ່ໄດ້ຕີບໍ່ໄດ້ຕີວະ, ມີແຕ່ສິ່ງເຂົ້າສິ່ງນ້ຳສິ່ງທາງໃຫ້ອ້າຍນ້ອງເພື່ອນນີ້ແນວນັ້ນໃດ່ໃຜກໍ່ບໍ່ໄດ້ຕີ, ຕອນນັ້ນກໍ່ບໍ່ມີໃຜຕີ, ສູງສຸດລະແມ່ນບໍ່ແມ່ນຢາກຍ້ອງເພິ່ນເອງສູງສຸດລະແມ່ນເພິ່ນແຫລ້ວ ຢູ່ໃນຫັ້ນ ຈາກກອງຫຼອນແຕ່ກ່ອນເຂົາເອີ້ນທະຫານໂດດຈ້ອງ, ອອກຈາກທະຫານໂດດຈ້ອງເອີ້ນວ່າວ່າກອງໂຈນ, ອອກຈາກກອງໂຈນເອີ້ນວ່າທະຫານເຄິ່ງປະກອບອາວຸດ ອັນນັ້ນເບິ່ງພວກລຸງສຸບິນຍິງປ້ອມຢູ່ບ້ານນາດໍຫັ້ນ, ກົກໄມ້ສ່ຳນີ້ກໍ່ບໍ່ຖືກ ອັນນີ້ປືນນາເລກາ (ອາເມລິກາ) ຈັກແມ່ນທາງໃດຂອງບໍ່ເຄີຍ, ມີແຕ່ເອົາໝາກໂບມທີ່ນັ້ນແຫລ້ວໄປຮຽນ, ຮຽນຢູ່ບ້ານເອ່ນຖ້ຳເອ່ນນີ້, ພວກລຸງສະບິນຮຽນນີ້ກອງຫຼອນຮຽນຄືບໆຢູ່ຫັ້ນ. ສິ່ງລຸງສຸບິນ ອ້າຍວັນນັ້ນ ອ້າຍອີ່ສັງ ຜູ້ອ້າຍອີ່ເຫຼືອ ບ້ານດາກເລຫັ້ນ, ປີກາຍເປັນມະຫາອ້າຍບາຫັ້ນ, ປີກາຍປີຊືນເພິ່ນເປັນປະລັງຕີ່, ມັນຄືນໃຫຍ່. ປະລັງຕີ່ເອົາໝາກໂບ່ມມາຝັງ. ເລື່ອງລຸງສຸບິນຮຽນນີ້ ຮຽນກອງຫຼອນຫຼາຍກວ່າທະຫານຫຼວງ. ຄວາມຫຍຸ້ງຍາກຂຶ້ນເວລາເພິ່ນເຕົ້າໂຮມນີ້ ອຸ້ຍແຕ່ກໍ່ແຄນແນ່ ກອງພວກລຸງສຸບິນຂຶ້ນເຕົ້າໂຮມແຕ່ອັດຕະປື ໄປຄ້າຍປະນິບພຸ້ນກໍ່ໄປຮອດບ້ານນາພ້າວ, ກອງໄປກ່ອນຕີ່ຕາຍ, ນ້ຳຖ້ວມຕ້ອງເຮັດຂົວຕາມກົກໄມ້ນີ້ຊ່ວຍພວກມາຫັ້ນ. ພວກລຸງສຸບິນເປັນຜູ້ເກັບປືນເກັບຄືນມາຝັງນຳດິນພຽງມັນຊິເວົ້າອີ່ສັງເວລາບໍ່ມີນີ້ ເຈົ້າຊິເຮັດຮາກຢາກບໍ່ມີຍາມມັນມີລະຈີນໄປບໍ່ໄດ້, ມີອູ່ຢູ່ລະເຈົ້າສັກທັກໃສ່ລະເອົາຂີ້ດິນຂົນປະໄວ້, ເຈົ້າຕົ້ມເຂົ້າຢູ່ເທິງເຈົ້າເຮັດຕົ້ມຢູ່ລຸ່ມບໍ່ໄດ້. ອີ່ມີນ້ຳແນວນັ້ນແຫລະອັດຕະຄັດ. ໄປຫັ້ນແມ່ນຮອດວັນທີເກົ້າເດືອນແປດແມ່ນບອກກໍອອກ. ມັນເລີຍກັບມາລາວເພື່ອຕີເສິກ.

ໜຶ່ງຮ້ອຍສິບເອັດຄັ້ງຕີເສິກຫັ້ນ, ຄັ້ງກັນດານທີ່ສຸດທີ່ວ່າເອົາເລືອດມາ ແລກ ເອົາຊີວິດອັນນີ້ ຢູ່ພູກະບໍ້ນີ້, ຢູ່ພູກະບໍ້ຢາກຖາມໃຜກໍ່ຖາມພວກທີ່ຢູ່ພູກະບໍ້.

ພູຫັ້ນຢູ່ຊຽງຂວາງລະມີບ້ານຊຽງຂວາງຢູ່ເທິງພູ[98], ເຈົ້າຂຶ້ນຕັ້ງແຕ່ເຊົ້າ ຈົນຮອດສິບເອັດຫາສິບສອງໂມງຈັ່ງຮອດ, ພູກະບໍ້ມີຄວາມຫຍຸ້ງຍາກມັນຫຼາຍ ອັນ, ນ້ຳກໍ່ບໍ່ມີນີ້ເຈົ້າຢູ່ຫັ້ນບໍ່ແມ່ນມັນຊິມີນ້ຳມີໃນ, ເຈົ້າຂຶ້ນຜູ້ໜຶ່ງສອງຄືນນີ້ບໍ່ໄດ້, ປືນມັນຕັດໂລດ, ມັນສະກັດ ພວກລຸງສຸບິນຢູ່ຫັ້ນຈົນອ້າຍນ້ອງຮ້ອງໂຮ! ຍິນ ກໍ່ມາຍິງ.

ລຸງສຸບິນຢູ່ສາມເດືອນຊິວ່າອີ່ສັງ. ບັດນີ້ຢູ່ພູຈອງຫວອງເຮົາເບິ່ງແນວ ນີ້, ນີ້ເວລາເພິ່ນຢູ່ຊຽງຂວາງເພິ່ນແຫງນເບິ່ງ ຈັ່ງຊິເຫັນພູຈອງຫວອງມີສາມ ໜ່ວຍ, ພູໂຕນັ້ນກໍ່ຍັງແມ່ນຫຍຸ້ງຍາກລຸງສຸບິນ ກໍ່ຈົນເປັນໝາກເບີດ, ສັດຕູມາ ບຸກກໍ່ມາບຸກນີ້ແຄນແດ່ໄລຍະນັ້ນ ລຸງສຸບິນຍັງມີຈິດໃຈແນ່ນອນ ກາງຄືນເພິ່ນ ຝັນເຫັນຜູ້ສາວສອງຄົນນຸ່ງສິ້ນກ່ານຜົມຍາວແນວນີ້ແຫລະ, ຜູ້ສາວມາຖາມເພິ່ນ ຢູ່ອີ່ສັງເຂົາວ່າດຽວນີ້ແມ່ນແຂກມາບຸນມາສິນເຕັມເຮືອນເຕັມຊານລຸກແມ, ເຂົາ ວ່າບໍ່ລະອາຍໝູ່ບໍ. ລຸງສຸບິນຜູດລຸກ. ລຸກເພິ່ນໃສ່ເກີບແລະເອົາປືນຮັດແອວໄປ ເລາະໆ. ເມື່ອຮອດບ່ອນພໍດີແຈ້ງ ແລ້ວເພິ່ນປິດເກີບເບື້ອງໜຶ່ງ, ຮ້ວາຍອາກາ ຫ້າສິບເຈັດຫັ້ນໃສ່ໂລດແລ້ວຕຶ້ງຕັ້ງໆ ຂອງຊ່ຳນີ້ຊ່ຳເຮືອນອີ່ແກ້ວຫັ້ນ ໝົດມື້ນັ້ນ ພວກລຸງສຸບິນຕີ. ເປັນທະຫານບໍ່ຫານຍິງປືນ, ຢູ່ປ້ອມທີ່ໜຶ່ງນາຍຮ້ອຍກໍ່ປິບ. ປ້ອມທີ່ສອງນາຍຮ້ອຍກໍ່ປິບທັງປ້ອມທີສອງປ້ອມທີສາມ ຍັງແຕ່ປ້ອມລຸງສຸບິນ. ລຸງສຸບິນທຸ່ນທ່ຽງ, ເພິ່ນຢູ່ເພິ່ນຄຸ້ມຄອງອ້າຍນ້ອງສາມປ້ອມເດັດຂາດບໍ່ໃຫ້ໂຕນ ເຈົ້າໂຕນເຈົ້າກໍ່ຕາຍ. ກໍ່ບອກຂອງຄຳຂ້ອນກໍ່ເວົ້າແລ້ວ. ເປັນຫຍັງຈັ່ງວ່ານັ້ນ ຄຳຂວັນລູກປືນບໍ່ໃຫ້ຖືກທາງຫຼັງ, ຜູ້ໃດຖືກທາງຫຼັງບໍ່ໄດ້, ຄັນລູກປືນຖືກທາງ ໜ້າ ກໍ່ໄຄແນ່ເພິ່ນວ່າຄວາມໝາຍແມ່ນແນວນັ້ນ, ຄັນລູກປືນຖືກທາງຫຼັງ ແມ່ນ ເຈົ້າປິບໃຫ້ສັດຕູ ເຈົ້າຍອມແນວນັ້ນ, ພວກເພິ່ນຕີສັດຕູ ເປີດຕັ້ງແຕ່ເຊົ້າຮອດສີ່

---

[98] ຊື່ວ່າແຂວງຊຽງຂວາງມັນຈາກບ້ານຊຽງຂວາງຕັ້ງຢູ່ເທິງພູສູງໃກ້ກັບພູກະບໍ້ເຊິ່ງເປັນບັ້ນຮົບ ໃຫຍ່ໃນສະໄໝສົງຄາມ

ໂມງແລງ, ສອງຊົ່ວໂມງໝົດເກົ້າສິບລູກ. ລຸງສຸບິນຍິງເດກາແປດສິບສອງຈົນເລືອດຫູໄຫລ, ອັນນີ້ແນວນັ້ນເພິ່ນເປັນໝາກເບີດເລີຍແພດເອົາເຂົ້າໜົມ, ເຂົ້າໜົມຈີນນ້ອຍໆຫັ້ນ. ດຽວນີ້ເຂົາເອີ້ນຄືກັນກັບເຂົ້າໜົມຖົ່ວລຽນ, ອັນນັ້ນແພດຕຳໆ ແລ້ວຄ່ອຍເອົາຊະແລັງສີດເອົາເພາະກິນບໍ່ໄດ້ຫຍ້ຳບໍ່ໄດ້. ແລ້ວສຸບິນໄລຍະນັ້ນກອງພັນບັກຄຳໄລນັ້ນຄືນອັດຕະປືນີ້, ດຽວນີ້ຈັກມັນຢູ່ໃສ. ບາດສຸດທ້າຍເຂົາປິດມັນວ່າເຈົ້າຢ້ານບໍ ມັນວ່າເຮົາຢ້ານປິດອີ່ຫຼີນີ້ຄັນວ່າປ່ຽນກໍ່ປ່ຽນ ບໍ່ປ່ຽນກໍ່ຢ່າ, ອັນນີ້ບໍ່ແມ່ນເຮົາຢາກໂຕນໝົດອກເຮົາລາຍງານ, ຈັກໜ່ອຍວ່າບໍ່ລາຍງານ. ໝໍພັນເວົ້າໜັກອີ່ຫຼີແລະນາຍໝວດມັນວ່າແນວນີ້ "ລະຢ່າສູ້ຣົບຈັກເທື່ອ". ຈົກພັບນ້ອຍໆມາ, ເຈົ້າອ່ານເບິ່ງວ່າໝູ່ຢ້ານໝູ່ສຳເລັດຕີແທລ້ວຕັ້ງແຕ່ເຊົ້າຮອດສີ່ໂມງແລງບໍ່ໄດ້ກິນຮອດເຂົ້າ, ລູກປືນນີ້ປະກົດການຢູ່ສາມປ້ອມນັ້ນລູກລະທິກແມັດ.ໜຶ່ງສອງລູກແນວນັ້ນປະກົດການມັນ. ຈົນລູກຂວັ້ນມັນຫັ້ນ ສາຍຂາດເບາະ, ຈຸສື່ສານຕໍ່ສາຍບໍ່ໄດ້ບໍ່ທານໄປ, ຈະຕໍ່ສູງມັນກໍ່ແຕກຕໍ່ຕ່ຳມັນກໍ່ໄໝ້ຈັກຊິເຮັດແນວໃດ, ແປວ່າແມັດໜຶ່ງນີ້ຕີລາຄາຕ່ຳສຸດແມ່ນສອງລູກ, ລູກລະທິກໜ່ວຍຕາມເບິ່ງຫັ້ນ. ເບິ່ງຄ້ອນຈົນບໍ່ເຫັນໝົດປ້ອມພູພວກລຸງສຸບິນ. ພວກລຸງສຸບິນສາມປ້ອມມັນຢາກຂຶ້ນຫາກຂຶ້ນບໍ່ໄດ້, ສອງຄືນມັນຂຶ້ນຮອດຂຸມຄອງ ພວກລຸງສຸບິນ, ຜູ້ໜຶ່ງຖືກຈັບ,ອັນນັ້ນລຸງສຸບິນກັບອ້າຍກີຮ້າຍກັນ, ລາວວ່າຈັບແລ້ວບໍ່ໃຫ້ຂ້າຕີ, ໂອ ລຸງສຸບິນວ່າອີ່ພໍ່ມຶງຕີວ່າໂລດແທລ້ວຈັ່ງຊັ້ນລຸງສຸບິນຖາມສັ່ງກໍ່ວ່າຈິເປົ່າ ຖາມວ່າເຈົ້າຈັກຄືນຈິເປົ່າ, ກອງພັນໃດແດ່ມາຈິເປົ່າ[99]. ອັນໃດກໍ່ວ່າບໍ່ຮູ້.... ອັນໃດກໍ່ວ່າບໍ່ຮູ້ລຸງສຸບິນໂຍ້ເອົາແມ່ດໍໂອ້ຍດໍ [100] ຝໍເອົາປືນອາກາສຽບອັນນີ້ສອດອັນນີ້ແທລະຍອມໆເຊີນໂລດ.

ທະຫານສັດຕູແລ້ວ, ມັນເຂົ້າຄຸ້ມຄອງພວກລຸງສຸບິນ. ມັນເດັດດ່ຽວແທ້ໆ. ອັນນັ້ນພູໂຕນີ້ລະແມ່ນຕັ້ງອິດເຂົ້າ, ເຂດສັດຕູມັນເຮັດຢູ່ພູສຽດ. ລຸງສຸ

---

[99] ພາສານົ້ງຈິເປົ່າ: ແປວ່າບໍ່ຮູ້.

[100] ພາສາຕະລ່ຽງ ດໍ: ແປວ່າ ເຮັດ.

ບິນກໍຢູ່ຄືກັນ, ຕົ້ນຕໍລຸງສຸບິນຢູ່ທໍາອິດແມ່ນລະພູສຽດ, ພູສຽດຢູ່ເທິງບ້ານນາຄໍາ ຫັ້ນ. ຢູ່ຊຽງຂວາງຄືກັນ.

ຢູ່ເມືອງຄູນ, ເມືອງຄູນບ້ານນາຄໍາ. ນັ້ນຄືກັນພວກລຸງສຸບິນເກືອບວ່າ ຊິຂຸດຂຸມໃສ່ກັນໃດ ມັນຢູ່ສໍາລິດນີ້ແຫລະຈຸດຄໍາອ່ອນຢູ່ໂອ່ຍ! ມັນເວົ້າບໍ່ແມ່ນ ງ່າຍໆ ຄໍາອ່ອນເອົາປ່ອງປາເອົາເຂົ້າປຽກໜຽວປັ້ນນີ້ໂຍນໃຫ້ມັນ, ເອົ່າ! ພວກ ເຈົ້າຂີ້ທຸກ, ເຈົ້າວ່າເຮົາຢູ່ປ່າເຮົາມີປ່ອງປານີ້ໂຍນໃຫ້ມຶງກິນເດີ, ພວກເຈົ້າຂີ້ທຸກ ຫັ້ນຢູ່ພູສຽດບໍ່ແມ່ນງ່າຍນັ້ນແລ້ວ ໂຕສໍາຄັນແມ່ນໂຕນັ້ນ ຢູ່ປ່າຈິນບໍ່ມີເຂົ້າກິນ. ບັດນີ້ ຢູ່ຫັ້ນແມ່ນລຸງສຸບິນກັບລຸງຜຸຍແລ້ວ, ຜູ້ຕາຍກໍ່ຕາຍແລ້ວ, ມັນເຈາະຫູ ເຈາະຕາ, ຜູ້ຍັງຫັ້ນດັງຄອນ. ພວກລຸງສຸບິນແມ່ນສິບສອງໂມງ ໄປຕີໄປໂລດ ແຫລ້ວ, ບັກຜຸຍແຮ່ງເຈັບແລ້ວ, ພີ່ນ້ອງຂອງເພິ່ນເດເບິ່ງບໍ່ຈັກເຊັດນໍ້າຫູນໍ້າຕາ, ລຸງສຸບິນໄປຕີຈັ່ງພວກເພິ່ນໄດ້ຄືນເຈັບຫັ້ນ. ຄວາມຫຍຸ້ງຍາກຢູ່ຊຽງຂວາງ ນີ້ ແມ່ນສິບລະວັນກວ່າໝູ່ໝົດ. ນັບແຕ່ປີຫົກສິບເອັດ, ຫົກສິບສອງ, ປີຫົກສິບ ສາມ, ປີຫົກສິບສີ່ແມ່ນສິບລະວັນ. ຢູ່ພູປ່າດົງຄືກັນເລື່ອງຄວາມຫຍຸ້ງຍາກນີ້ພູ ປ່າດົງພວກລຸງສຸບິນຕີແຕກແລ້ວ, ໝາຍຄວາມວ່າວັນທີເກົ້າສຸດທ້າຍກອງພັນທີ ເກົ້າ, ຈັກແນວໃດແຫລະ ສັດຕູທ້າຄືນເຂົາກໍ່ໂຕນປ້ອມ, ສຸດທ້າຍລຸງສຸບິນກັບ ຄໍາເຟືອງນີ້ພວກເພິ່ນມີແຕ່ຄືນເກົ່າ, ຫົກສິບຄືນຖືກພວກລຸງສຸບິນໄປຕີ, ພວກ ເພິ່ນຕີກາງເວັນເລີຍໂລດແລ້ວ ຂອງພວກເພິ່ນກາໍໄດ້ພູມີປະເທດ. ບາດເພິ່ນຕີ ແລ້ວລະມາເວົ້າໃຫ້ເຂົາແຫລ້ວ ນາຍຮ້ອຍກໍ່ບໍ່ປາກນາຍພັນກໍ່ບໍ່ປາກ. ອັນນັ້ນ ແຫລະ ເວົ້າລະຂໍໂທດນໍາພວກເພິ່ນກິນຮອດນໍ້າຍ່ຽວບໍ່ມີເຂົ້າບໍ່ມີນໍ້າ, ຂຸດຂຸມຢູ່ ໃສກໍ່ນໍ້າບໍ່ອອກ, ຂອງພວກເພິ່ນຢູ່ປ້ອມພູສູງ. ເວົ້າລະຂໍໂທດນໍາເດີ ພວກເພິ່ນ ຂຸດບ່ອນເລີກຖ່າຍເບົາກໍບໍ່ອອກໂຍະຕາຍ. ສຸດທ້າຍຕອນສີ່ໂມງອ້າຍກີສິ່ງຂ່າວ ມາ ມື້ອື່ນກະກຽມເດີຕີ ໃຫ້ພວກລຸງສຸບິນກະກຽມ ແຕ່ລະປ້ອມຕ້ອງກະກຽມໝົດ ແມ່ນເຈັດໂມງແຕກສຽງປືນຟັງເບິ່ງຄັ້ງແປດສິບຫ້າເດີ. ແປດສິບຫ້າມາຮອດນີ້ ແລ້ວ ໝູ່ເຈົ້າຕິດຕາມເດີ! ລຸງສຸບິນກໍ່ຟັງແຫລະລະເດິກກາງຄືນຈັ່ງຝົນຕົກນໍ້າ ແດງ ອຶ່ງຄຶ່ງໂອ້ຍ! ຖືວ່າແຊບແທ້ໆແຫລະຕັກໃສ່ຜ້າຢາງນີ້ເອົາແພມຸ້ງຕອງ

ເອົາ.ອັນນັ້ນກໍເຈັດວັນບໍ່ໄດ້ກິນເຂົ້າແຫລະເກືອບຕາຍອີ່ຫຼີ. ນ້ຳຫັ້ນກໍ່ແຄນແນ່ ຂອງທາງຊຽງທາງເໜືອເຈົ້າເອົາແພຢາງໂຕ່ງເອົານຳໝອກຫັ້ນ ຈັ່ງໄດ້ສອງບີ່ ດົງໝົດຄືນຫັ້ນແນວນັ້ນໃດ. ນ້ຳອື່ນໆນີ້ບໍ່ມີແຫລະມີແຕ່ນ້ຳ ອັນນັ້ນແຫລ້ວ ເລື່ອງມັນຕື່ນຕອນເຊົ້າເຈັດໂມງຢືນແຫລ້ວ. ລຸງສຸບິນບໍ່ໄດ້ຍິງດອກແປດສິບຫ້າ ເພິ່ນຍິງແຕ່ກົກມັນນີ້ປະແຕ່ບ້ານໄຮ່, ໄທເຈົ້າຮູ້ບໍບ້ານໄຮ່ຕາແສງແປກ. ເມືອງ ແປກນີ້ທາງນີ້ຕັ້ງຕັດປ່າດົງນີ້ໄປທາງບ້ານທ່ານີ້, ຢູ່ຫັ້ນກໍຕັ້ງແປດສິບຫ້າ ຢູ່ໆ ລືມກັນແຫລ້ວ, ຈັກໜ້ອຍວື່ວໆ ໆ ພວກລຸງສຸບິນໂຕນຂຸມອຶກກະທຶກ, ປືນສັດ ຕູຂອງມັນຕົກກາງຄືນ ພວກລຸງສຸບິນໂອ້ຍດີໃຈ, ກຽມໃສ່ເລີຍຕອນແລງ ພວກ ເພິ່ນຈັ່ງໄດ້ກິນເຂົ້າ. ໝົດມື້, ມື້ນັ້ນຕີ, ຂອງຫວຽດຕີບໍ່ໄດ້. ອັນນັ້ນພວກລຸງ ສຸບິນຍຶດໝົດແຫລະ ທຸກປ້ອມ, ຫວຽດສອງປ້ອມຍຶດບໍ່ໄດ້ຊ້ຳ.

ທະຫານຫວຽດສອງກອງພົນສອງປ້ອມຍຶດບໍ່ໄດ້ຈັກປ້ອມ, ສອງປ້ອມ ແປວ່າສອງກອງຮ້ອຍປ້ອມໜຶ່ງກອງຮ້ອຍໜຶ່ງ, ຈັກແນວໃດໄປຕີຄືວ່າຫັ້ນແຫຼະ, ແຕ່ວ່າທະຫານເກັ່ງນາຍບໍ່ເກັ່ງກໍ່ເຮັດບໍ່ໄດ້ເລື່ອງແນວໃດກໍ່ມີ. ສະນັ້ນສຸດທ້າຍ ລາວໄປຕີ. ຖ້າທະຫານບໍ່ເກັ່ງທາກນາຍເກັ່ງນີ້ກໍ່ເຮັດໄດ້ອັນນັ້ນ ເລື່ອງສູ້ຮົບອັນ ນັ້ນລະຄວາມຫຍຸ້ງຍາກເວົ້າຫຍັງ. ສູ້ຮົບໄດ້ໜຶ່ງຮ້ອຍສິບເອັດຄັ້ງລະແມ່ນອັນນີ້ ແລ້ວ. ມັນໝູນວຽນແນວນີ້ໝົດ ເລົ່າບໍ່ໄດ້ນາຄືນເລົ່າບໍ່ໄດ້ນາຄືນເລົ່າໄດ້ແທ້ ບ້ານຄອກບ້ານເຄັກ. ບ້ານຄອກ ໝູເວົ້າສະເພາະບ່ອນບ້ານອ້າຍບຸນນຽນກໍ່ສີ່ ຫ້າມື້ພວກເພິ່ນແບບນັ້ນກບ້ານອັນນັ້ນພວກເພິ່ນບໍ່ຕີພັດເຂດປົດປ່ອຍ. ບ້ານນີ້ ບ້ານພື້ນຖານ ຈຳເປັນພວກເພິ່ນເຮັດໃຫ້ສັດຕູອອກ, ຈັ່ງເປັນພື້ນຖານເຮັດ ວຽກໄດ້. ຄັນເຈົ້າບໍ່ແກ້ອັນນັ້ນນີ້ບໍ່ໄດ້ທາງບ້ານປຽງນີ້ຄືກັນ, ທາງເມືອງຕົ້ນຮອດ ບ້ານປູໄປພຸ້ນ.

ບັ້ນຮົບລຸງສຸບິນຖືກບາດເຈັບຢູ່ແຂນ ມັນກັນດານແທ້ ຢູ່ພູນີ້ທີ່ກວັນມັນ ບຸກ,ມັນບຸກທີ່ກວັນ. ຢູ່ພູອັນນີ້ບ້ານພູສີອັນນີ້, ບ້ານນາຫຼວງອັນນີ້, ບ້ານຄອນ ສະຫວັນລຸງສຸບິນລະຂຸດຂຸມຢູ່ນີ້ປ້ອມໂຕນີ້. ຢູ່ຊຽງຂວາງຄືກັນເມືອງພູຄູນ, ຕາ ແສງຊຽງອັນນັ້ນພວກເພິ່ນຕີ, ຕີມື້ນັ້ນແລ້ວຕັ້ງແຕ່ເຊົ້າ,ມື້ທີ່ທີ່ກມື້ລຸງສຸບິນບາດ

ເຈັບ. ບໍ່ຍິນແຫລະສັດຕູນີ້ບະ! ຄືວ່າແຫລະຢາສູບກໍ່ບໍ່ມີລຸງສຸບິນອົດຢາສູບບໍ່ໄດ້ຕີ໋. ເພິ່ນວ່າໄປ໋. ໄປອາບນ້ຳກ່ອນເພິ່ນບອກໃຫ້ອ້າຍນ້ອງພວກເຈົ້າຢູ່. ເພິ່ນລົງໄປອາບນ້ຳຊັກສິ້ງເສື້ອ, ມື້ອື່ນ ເພິ່ນຊິລົງບ້ານຕາມແຜນການເພິ່ນໜຶ່ງກໍ່ເຫິງແລ້ວບໍ່ໄດ້ເຫັນປະຊາຊົນ, ສອງຢາກສູບຢາ, ຢາກຂໍຢານຳປະຊາຊົນຂອງໄປບ້ານໃດກໍ່ແນວນັ້ນ. ບາດສຸດທ້າຍພໍດີເພິ່ນຕີສັດຕູແລ້ວເພິ່ນເອົາສິ້ງເສື້ອແລ່ນ, ເພິ່ນແລ່ນຮອດໃສກໍ່ວ່ານີ້ແຫລ້ວເຈົ້າຢູ່ນີ້ແລ້ວເຈັດຄືນ, ຢູ່ປ້ອມຫັ້ນໝູ່ເຈົ້າຢູ່ນີ້ເນີ, ລຸງສຸບິນສາມຄືນລົງໄປຕີມັນ ບໍ່ໄປຕີມັນກະບໍ່ໄດ້ດອກ, ພວກລຸງສຸບິນໄປ, ລຸງສຸບິນນີ້ລົງມື. ໝໍເຈີ່ນີ້ກັບໝໍສີທານີ້, ຢູ່ປິດມີນາຍໝວດນີ້ໝໍແພງເຈົ້າຢູ່ນີ້ເດີ, ຂອງໝໍແພງນີ້ຄືນລຸງສຸບິນເຄີຍໃຊ້ເຮັດໄດ້. ມອບວຽກຈັ່ງໃດແມ່ນລາວເຮັດໄດ້ອັນນັ້ນ, ບາດນີ້ຈັນທານາຍຮ້ອຍຫັ້ນຢູ່ພຸ້ນບໍ່ໄດ້ອອກ, ລາວປານໂຕລິ່ນແນວນັ້ນແລ. ພໍດີຕີສັດຕູລູກປືນໝົດບັ້ງໜຶ່ງແລ້ວ ມັນລົງຄ້ອຍພໍດີມັນຢູ່ທາງຂ້າງລຸງສຸບິນຍິງ, ມັນຖິ້ມໝາກແຕກໃສ່, ໝໍເຈີ່ຢູ່ນີ້ໝໍຈັນທາແດ່, ໝໍເຈີ່ເວົ້າໝູ່ຢູ່ຫັ້ນຖືກໝົດສາມ ແຄນແນ່ໝໍເຈີ່ມັນແຖ, ແຖໂຕນີ້ພໍເປັນດາດໆຊື່ງຊ້ຳນີ້ແຫລະມັນໃຫຍ່ຫາກບໍ່ຊອດ, ລຸງສຸບິນນິ່ງດັບປັບໂລດ, ເພິ່ນເອີ້ນໝໍແພງ ແພງໆມາເອົາເຮົາແນ່, ໝໍແພງມາເອົາເພິ່ນ, ເອົາເມືອຮອດປິດ, ເອົາສາຍມາເພິ່ນຢາກລືມສາຍ, ລືມສາຍຫາອ້າຍກີ, ອ້າຍກີເອີຍດຽວນີ້ເອົາຜູ້ໃດມາປ່ຽນກໍ່ໄດ້ຫາກບອກໄດ້, ເອົ່າຜຸຍ ລຸງສຸບິນວ່າພວກເຮົາບໍ່ມີໃຜ, ເຮົາຖືກບາດເຈັບແລ້ວ, ຫາກບໍ່ແມ່ນເຈັບ, ແຂນກໍ່ກຸດຕາກໍ່ບອດໝົດສອງເພິ່ນວ່າ, ບໍ່ວິນບໍ່ວິນລາວວ່າ, ເມືອລາວວ່າ, ເມືອໃຜຊິຫ້າມລຸງສຸບິນວ່າ. ບອກຄຳໄຫຼຫັ້ນໄປເອົາລຸງສຸບິນວ່າ, ເພິ່ນຖືກຢູ່ສີ່ໂມງລະເດອັນນັ້ນ. ຕົ້ມເຂົ້າຫວະອ້າຍນ້ອງໄປ, ພໍດີອ້າຍນ້ອງຫາມລຸງສຸບິນໄປຮອດຫັ້ນ ເພິ່ນວ່າຂຶ້ນໆ, ບໍ່ໆລຸງສຸບິນວ່າ, ໄປ໋ເມືອ, ລາວຫາມເລີຍຮອດໂຮງໝໍ, ໂຮງໝໍຂອງແຂວງ, ແຂວງກໍ່ຢູ່ຫັ້ນ. ໂຮງໝໍອັນນັ້ນກໍ່ຢູ່ຫັ້ນເມືອຮອດຫັ້ນແຫລ້ວອ້າຍອື່ງມາແຫລະກັບຫວຽດຫັ້ນ ແພດຊັ້ນສູງເຂົາມາຮອດຫັ້ນແຫລະ ລຸງສຸບິນວ່າອ້າຍກີເອີຍຢ່າປະເຮົາ, ເຮົາຕາຍລະມຽນ, ຢ່າໄປຖິ້ມທິ່ວທີບທິ່ວແດນ, ເພິ່ນນີ້ບໍ່ແມ່ນເດັກນ້ອຍລຸງສຸບິນວ່າ. ລຸງສຸບິນເວົ້າແນວນັ້ນ

ແຫລະເສີຍໆ, ບໍ່ເປັນຫຍັງຫວຽດເອົາໄຟສາຍເຍືອງຕາເບື້ອງນີ້, ເຍືອງໄປເຍືອງມາແຕ່ຕາເພິ່ນໂຕນີ້ພໍໄດ້ເຫັນໜ້ອຍໜຶ່ງພາງ, ເບື້ອງນີ້ບໍ່ເຫັນແຫລ້ວເຫັນອີ່ສັງສະເກັດມັນສໍ່ານີ້ຖືກ. ໂອ້! ລຸງສຸບິນຢູ່ເຈັດວັນຢູ່ໂຮງໝໍຫັ້ນ, ຕໍ່ໄປເພິ່ນໂຮງໝໍບ້ານຊ້ອນນີ້, ໂຮງໝໍສູນກາງ. ສະຫາຍຄໍາສະຫວັນກັບສະຫາຍເຟືອງເດ ຢູ່ຫັ້ນຮັບຜິດຊອບໂຮງໝໍສູນກາງຫັ້ນ, ຫັ້ນລະໝູ່ໃຫ້ລຸງສຸບິນອອກໄປປິ່ນປົວຢູ່ຫວຽດນາມ. ເພິ່ນວ່າອອກກໍ່ອອກຈາກຫັ້ນລະໄປ, ຄືນສາມສິບສອງເສຍອີງຄະເຈັບພາຍໃນອີກເນື່ອເລີຍ. ເມື່ອຮອດໂຮງໝໍຮ້ອຍແປດລຸງສຸບິນລະໄປບໍ່ໄດ້ເຂົ້າຊ້ໍາເພິ່ນຢູ່ສອງຮ້ອຍສິບສີ່, ເພິ່ນໄປໂຮງໝໍເລີຍປິ່ນປົວຢູ່ຫັ້ນແຫລ້ວປົວເດືອນໜຶ່ງອອກ, ເດືອນໜຶ່ງເຂົາບໍາລຸງຊິເຈາະຕາເພິ່ນນີ້: ໜຶ່ງຊິເຈາະຕາເພິ່ນ, ສອງຊິປາດໃສ້ຕິ່ງເພິ່ນ, ໃສ້ຕິ່ງເພິ່ນເຈັບນີ້ເຂົາບໍາລຸງ, ບໍາລຸງລະຈັ່ງຄ່ອຍປາດຕາເພິ່ນ, ເຂົາເຈາະບໍ່ເຈັບດອກແນວເຂົາສີດຢາ, ເຂົາບີບນີ້, ເຈາະໂຕນີ້ປີດມັນອອກ, ມັນເລີກຫັ້ນຕີ້. ເຂົາສີດເຫຼັກມັນຊິຊອດທາງນີ້ຫັ້ນແຫລະ, ອັນນັ້ນຕີ້ລຸງສຸບິນເຈັບ, ເຂົາບໍ່ໃຫ້ມັນເປົ່າເດ ລຸງສຸບິນດິ້ນຈິນຕິກຕຽງ ອ້າຍຢຸງຫັ້ນມາ. ແຕ່ກ່ອນຄົນຫວຽດນາມໃຕ້ລາວຮູ້ໝົດທາງເມືອງດາກຈຶ່ງພວກເຮົາເນາະລາວວ່າ ເປັນຫຍັງພວກເຈົ້າປະໄວ້ແນວນີ້ ໝໍນີ້ບໍ່ຄືໝູ່ເອົາເຈົ້າເປັນຜູ້ຮັບໃຊ້ໃຫ້ເຈົ້າໄປຍໍ, ໃຊ້ປະລັງກາຈັ່ງເມືອຫຼອນ, ສາມວັນລຸງສຸບິນກິນອີ່ສັງກໍ່ບໍ່ໄດ້ແນວນັ້ນຢູ່ຫັ້ນເຂົາບໍາລຸງຢູ່ບໍ່ຕີ, ຕີແຕ່ບໍ່ຢາກ.

ລຸງສຸບິນໄປໂຮງໝໍຮ້ອຍແປດ, ຮ້ອຍແປດກັບວຽດໄຊຫັ້ນໃກ້ແຫລ້ວອັນນີ້ແມ່ນວຽດໄຊ[101], ເບື້ອງນີ້ແມ່ນຮ້ອຍແປດ, ຄືນລາວຢູ່ຫັ້ນລະແມ່ນສອງຮ້ອຍແປດສິບຄືນເສຍອີງຄະ. ລຸງໄມສຸກຫັ້ນມອບໃຫ້ລຸງສຸບິນຕິດຕາມເພິ່ນຢູ່ປະຈໍານີ້ເດ ຕິດຕາມສຶກສາອົບຮົມອາໂໝດ, ອາຮາຍ, ເບໂໝດ, ເບຮາຍນີ້ (A1, A2, B1, B2). ບາດນີ້ຈຸທີ່ຕິດແປດອີກນີ້ ຮ່າດົງນີ້ກໍ່ບໍ່ໄດ້ໄປ. ລຸງສຸບິນວ່າແຂນກັບຕານີ້ແມ່ນຖືກພ້ອມກັນ. ນັບແຕ່ຄ່ານີ້ຂຶ້ນໄປໝົດແຫລ້ວ, ນີ້ກໍ່ສະເກັດ

101 ໂຮງໝໍຮ້ອຍແປດແມ່ນໂຮງໝໍທະຫານຂອງຫວຽດນາມຢູ່ຮ່າດົງໃກ້ກັບຮ່າໂນ້ຍ. ໂຮງໝໍຫວຽດໄຊແມ່ນໂຮງໝໍມິດຕະພາບຫວຽດນາມໂຊວຽດຢູ່ຮ່າໂນ້ຍ.

ແຫລ້ວ, ນີ້ກໍ່ຍັງປານນັ້ນວ່າໃຫ້ເຂົາປາດກໍ່ປາດບາດເຈັບລະເຈັບເບື້ອງດຽວນີ້. ເພິ່ນວ່າດຽວນີ້ສະເກັດມັນຫັ້ນຍັງຢູ່, ຟ້າຝົນ, ຝົນຊິຕົກບໍ່ຫຼືຊິແດດບໍ່ຮູ້ໝົດ ມັນຕິສາຍມາຄືກັນໂຫລະເລກໄວສຸດ, ຮູ້ຈັກຝົນຊິຕົກແມ່ນຄັນໝົດແຫລະ.

ໃນກອງດຽວຕີເສິກຫັ້ນ ພວກມຶງສອງຄົນເປັນທະຫານ, ຢູ່ນຳລຸງສຸບິນເຜົ່າມຶ້ງບໍ່ມີ, ມີແຕ່ຂະມຸນີ້ ຄົນຫຼວງພະບາງນີ້ກັບຄົນອັນນັ້ນຄົນຜົ້ງສາລີ, ຄົນພາກໃຕ້ມີຄົນສະຫວັນນີ້ ສີ່ຄົນຫ້າຄົນ, ພາກໃຕ້ນີ້ມີຜູ້ດຽວມີແຕ່ຂະມຸຫຼາຍ. ເຜົ່າຂະມຸເຂົາກໍ່ເຈັບຄືກັນຕາຍຄືກັນ. ແຕ່ວ່າກອງພວກລຸງສຸບິນນີ້ແນວນີ້ບໍ່ມີໃຜຖືກເຈັບ, ນັບແຕ່ລຸງສຸບິນບັນຊານາຍໝູ່, ເພິ່ນບັນຊານາຍຮ້ອຍບໍ່ມີໃຜເຈັບຈັກເທື່ອ, ບາດປັບລຸງສຸບິນ ຖືກບາດເຈັບຍິນຂ່າວເພິ່ນເມືອຮອດຄັ່ງໄຂ, ເຂົາວ່າບຸນມາຄົນຫຼວງພະບາງແຄ່ງຫັກ. ບາດນີ້ອ້າຍນ້ອງຖືກເຈັບເພິ່ນຊິແລ່ນໄປເອົານີ້ຢຽບໃສ່ຂຸມແຄ່ງຫັກ, ຕໍ່ຈາກຫັ້ນລະວ່າຄຳເຟືອນຂຸມຫຼຸຂອງຂຸມຫັ້ນລຸງສຸບິນບອກແລ້ວບໍ່ໃຫ້ເຈາະ, ໃຫ້ຂຸດລ່ອງເລີຍບໍ່ໃຫ້ເຈາະພື້ນຂອງດິນ, ແນວນັ້ນບໍ່ໄດ້ບໍ່ຢູ່. ຄຳເຟືອນຫັ້ນແຂນຫັກ ເຂົາວ່າມັນລ້ຽງປາ, ດຽວນີ້ຈັກຢູ່ໃສບໍ່ຮູ້ຂໍອະໄພໂທດນຳ, ບາດນີ້ຄຳພາຫັ້ນ ອີກອ້າຍນ້ອງຂອງຈັນເພັງ, ຈັນເພັງແພດເພິ່ນມາຢູ່ສິນລະປະຫັ້ນ, ເຂົາຫຼິ້ນອັນນັ້ນກໍ່ຄືກັນຕະນຶງພຶງພຶດ ລຸງສຸບິນຢູ່ເວົ້າສັດຊື່ບໍ່ມີໃຜເຈັບຖືກບາດເຈັບຈັກເທື່ອ, ເພິ່ນວ່າເສຍຂ້ອນແລ້ວພວກເຮົາ. ຮອດດຽວນີ້ເພິ່ນຈັ່ງຮູ້ຈັກວ່າໂອ້ເຮົານີ້ບໍ່ແມ່ນຍ້ອນອັນອື່ນ, ເພິ່ນມາເບິ່ງໝໍເໝືອນີ້, ໝໍເປີນຄົນຫຼວງພະບາງ, ພວກເພິ່ນກຳລັງກິນເຂົ້າ. ຕິດຕາມເດີຍ່າກິນຢູ່ນອກ, ກິນຢູ່ຂຸມຕິດຕາມເບິ່ງ. ໝໍເປີນອອກເບິ່ງສັດຕູໃດຢູ່ກ້ອງ, ລາວໄປຂຶ້ນກົກໄມ້ຊິຫັກທາຍຫັ້ນລຸງສຸບິນວ່າ ອີ່ພໍ່ມຶງເບາະຍິງມັນແມ່ປືນຍິງມັນໝົດສອງຄົນຫັ້ນ, ເອົາໝວກມາເອົາໝວກມາສຸບ, ລຸງສຸບິນກະບໍ່ເບິ່ງຂອງມັນມີຍັນມີແພມັນເດ [102]. ລຸງສຸບິນວ່າຍ້ອນໂຕນັ້ນວ່າຂອງແນວເຂົາວ່າຊິໄປຕີມັນດັງຄວາກຄາກໆ, ໂອ້!

---

102 ຢັນເຂົາເຮັດດ້ວຍທອງ, ຕີເປັນໃບແລ້ວຂຽນມົນຄາຖາໃສ່ພັນເປັນຫຼອດ, ໃຫ້ຄູບາສູດ, ເປັນຄົງ-ບັງ,ໄປຕີເສິກລູກປືນບໍ່ຖືກ,ຫຼືຖືກບໍ່ເຂົ້າ,ນັ້ນຄວາມເຊື່ອຂອງຄົນລາວແຕ່ກ່ອນເຖິງປະຈຸບັນ.

ລຸງສຸບິນຄິດໂລດແລ້ວບໍ່ໄດ້ເລື່ອງແຫລະອັນນັ້ນ. ຈຶ່ງວ່າແນວໃດໝູ່ຈັ່ງປະເອີບໄປຕິເສີກ, ໝູ່ເອົາໝູ່ຢາກໄດ້ແຕ່ເຄື່ອງ, ລຸງສຸບິນລະຕິເສີກນ້ຳຕານນ້ຳນົມນີ້, ຢາສູບນີ້ແນວນັ້ນ. ໝູ່ຕິເສີກລະເບິ່ງແຕ່ເຄື່ອງມັນ, ຈັ່ງໃດໝູ່ຮັກສາໄດ້. ແນວນັ້ນເລື່ອງມັນນັ້ນແຫລ້ວຊິມີຫຍັງ. ໄປຮຽນຕອບແຕ່ວ່າສະຫວາດສະເຫວີຍ, ຮີບຢູ່ໃກ້ເຫັນຍິກໆໆ, ບຸນລ້ອມນີ້ເສຍອີງຄະຍາມວ່າຢ່າເຮັດແນວນັ້ນຈັບເຈົ້າໃດ່ມັນເຫັນຄືນນີ້ມັນເອົາໄມ້ຄ້ອນເທົ້າມັນເກາະ, ແລ້ວກໍ່ເປັນຜູ້ເກາະ, ເກາະລະຖາມອັນນັ້ນແຫລະ, ຖາມກໍ່ຕອບວ່າເຮົາໄປຮຽນ, ເຂົາໄປກິນຢູ່ໃສ, ລີ້ງເສື້ອເດລັດຖະບານໃຫ້ແນວນັ້ນ ຕອບກໍດາຍສາມວັນຮຽນນຳມັນຫັ້ນກໍດາຍ. ຮຽນນີ້ນັ່ງເປັນແຖວແຫລະ, ເອົາແຖວນີ້ກ່ອນໝົດແລ້ວເອົາແຖວນີ້ອີກ, ໝົດແລ້ວຕົກແຕ່ລະບຸກຄົນໃຜຢາກຮຽນລະບອກຄວາມເຫັນຂຶ້ນອີກ, ພໍ່ກໍລຸກແນວນັ້ນເລື່ອງມັນ.

ລຸງສຸບິນມາແຕ່ສູນກາງພຸ້ນລະ ເມືອບ້ານກໍ່ຈຳເປັນໄດ້ເອົາ. ມາຮອດບ້ານ ແຕ່ລຸງສຸບິນບໍ່ຢາກເອົາທຳອິດຈິດໃຈຂອງເພິ່ນ. ເມືອຍາມພໍ່ຂອງເພິ່ນທີກເດືອນເດເຂົາກຳນົດໃຫ້ເພິ່ນໃນໃບເດີນທາງ, ມາຍາມພໍ່ເພິ່ນລະຊິເມືອ. ເພິ່ນມາຮອດນີ້ລຸງບົວລາງ, ເອື້ອຍວັນໄຊເວົ້າວ່າຢູ່ໃສກໍ່ເຮັດການປະຕິວັດຄືກັນ, ບໍ່ໃຫ້ເມືອຢູ່ນີ້, ເພິ່ນວ່າຢູ່ກໍຢູ່ ຢູ່ກໍເອົາເມຍແຫລະ.

ຫຼັງຈາກລຸງສຸບິນຖືກເຈັບແລ້ວ ປີຫົກສິບສີ່ ເພິ່ນເສຍອີງຄະ, ຖືວ່າເພິ່ນແຕ່ງງານປີຫົກສິບຫົກ, ເດືອນໜຶ່ງບໍ່ເອົາກໍຈຳເປັນເພິ່ນເສຍອີງຄະເປັນກໍ່າພ້າ, ກໍ່າພອຍ, ລູກກໍ່າພ້າກໍ່າພອຍ, ທາງບ້ານວ່າເອົາສາຢູ່ນຳກັນຕໍ່າຫູກຕໍ່າຝ້າຍ, ຢູ່ກັບເພິ່ນຮັບໃຊ້ເພິ່ນນີ້, ກໍ່ມີຈອນນິເດຢູ່ບ້ານໄຮ່ຫັ້ນແຫລະເມຍຂອງສະຫາຍອີສັງລຸງສຸບິນໄປຍາມ, ລາວແຫລະເອົາກ່ອນໝູ່ທຳອິດ ລຸງສຸບິນຖືກບາດເຈັບຢູ່ຊຽງຂວາງ, ມີຄົນເພິ່ນຮັບໃຊ້ຜຸຍ. ບາດນີ້ລຸງສຸບິນແລະສົມຈັນໝູ່ເພິ່ນ. ສົມຈັນຮັບໃຊ້ຄືນວັງວຽງເດີ, ຄົນເຈັບໜັກເດີລຸງສຸບິນຖາມໄປຖາມມາເບິ່ງເຈົ້າໂອ້! ເພິ່ນວ່າເຮົານີ້ແຫລະເອົາເມຍເອົາຜົວກ່ອນໝູ່, ຜົວມັນແຂນກຸດສອງເບື້ອງແນວນັ້ນລຸງສຸບິນວ່າ. ແຕ່ນີ້ແຜນການຂອງຈຸນີ້ບໍ່ມີ. ມາເບິ່ງຈຸສະຫວັດດີການນີ້ກະຊວງສະຫວັດດີການນີ້. ນັກຮົບເກົ່າ, ລຸງສຸບິນບອກເຮັດປອກໃສ່ນີ້ເອົາບ່ວງ

ທັ້ນສຸຍກິນ ສຸຍກິນເຂົ້າດຽວນີ້ລະໄປຈັບແນວນີ້, ແນວໃດຊິເປັນເບື້ອງໜຶ່ງສັ້ນ ເບື້ອງໜຶ່ງຍາວ. ເຮັດແບບນີ້ກິນມັນກໍ່ບໍ່ເປັນຕື່, ລຸງສຸບິນບອກເຮັດປອກນີ້ຫວຽດ ນາມມັນເຮັດ, ເຂົາເຮັດປອກໂຕນີ້ສຸບໃສ່ແລ້ວເຂົາເຈົ້າກໍ່ສາມາດຈັບໄດ້ກິນໄດ້ ເອງ. ເຂົາເຮັດປອກແລ້ວກໍ່ເອົາບ່ວງນັ້ນສຸບໃສ່, ມາກໍ່ເອົາບ່ວງທັ້ນສຸບໃສ່ນີ້, ລະກໍ່ຕັກກິນແນວນັ້ນ ທາງກະຊວງອັນນີ້ລຸງສຸບິນກໍ່ເວົ້າກັບອີສັງພັນຕີຄຳວຽນ ທັ້ນ, ເອີໄດ້ແລ້ວ, ເຈົ້າຢ່າຊິເວົ້າໃດລຸງສຸບິນວ່າເຈົ້າຂາກຸດເບື້ອງດຽວ, ເຈົ້າເອົາ ເບິ່ງຖ້າຂາເຈົ້າກຸດສອງເບື້ອງເຈົ້າຊິບໍ່ຈື່ງ, ກໍ່ຕ້ອງມີແຜນການຕີເຮົາວ່າອີ່ຕົນ ເຂົາຫຼາຍຄົນເປັນຕົ້ນວ່າຜູ້ທີ່ຂາກຸດ, ແຂນກຸດສອງເບື້ອງນີ້ແຫລະມັນຍາກຕ້ອງ ເຮັດປອກໃຫ້ເຂົາມັນຈື່ງຊິເປັນ. ໃນໄລຍະທີ່ກອງພັນທີສອງຜ່າວົງປິດລ້ອມນີ້ ອອກໄປສູ່ເຂດປົດປ່ອຍທັ້ນ ລຸງສຸບິນກໍ່ນີ້ໄດ້ຢູ່ໃນທັ້ນແລ້ວຄືເພິ່ນໄດ້ເລົ່າໃຫ້ຟັງ ມາແລ້ວ. ເພິ່ນເຄີຍເຫັນເຂົາເຈົ້າສະແດງໜັງຂອງກອງພັນທີສອງຜ່າວົງປິດ ລ້ອມ. ເຫັນສະແດງຖືກກັບຄວາມຈິງ, ແຕ່ວ່າເຫັນກໍ່ມັນເປັນຈັ່ງຊີ້ເນາະເພິ່ນກໍ່ ຢາກຕີຢູ່, ເຫັນສະແດງຖືກກັບຄວາມຈິງ, ແຕ່ວ່າເຫັນກໍ່ມັນເປັນຈັ່ງຊີ້ເນາະເພິ່ນ ກໍ່ຢາກຕີຢູ່, ເຫັນການສະແດງທັ້ນ ມີບິດໃດບິດໜຶ່ງນັ້ນເອົາຄົນເກົ່າແນ່, ນີ້ເອົາ ແຕ່ຄົນໃໝ່ເຮັດແບບທັດສະນະສັດຕູບໍ່ເປັນ, ເຊົາຢ່າເຮັດ. ເຈົ້າເຫັນວ່າເຈົ້າຊິ ວ່າໂອ໋! ເຮົານີ້ເປັນທະຫານເຮັດໄດ້ບໍ່ໄດ້. ໂອ້ຂໍອະໄພໂທດຍິງວັນທີ 21, ຍິງ ລະແມ່ນວັນທີ 20 ທະຫານແຫ່ງຊາດໃໝ່ເຂົາຈຳແນກໄດ້ ນຸ່ງເຄື່ອງຄືກັນ. ບາດນີ້ໄປພວກລຸງສຸບິນທົດລອງແລ້ວໄປຂໍອະໄພໂທດນຳສົມມຸດ 3-4 ຄົນໄປ ສອງຄົນ, ໄປປັບຈັບສອງປະຕູ, ແມ່ໃສລູກສາວຂອງແມ່ເດໄປໃສ? ໂອ້ຍໄປ ເຮັດວຽກ, ອູ່ວຽກໄປໃສອັນນັ້ນ. ບາດຜູ້ນຳຫຼັງໄປແລະເວົ້າແບບຄົນເຮົາເພິ່ນວ່າ ລູກເອີຍລູກຊິປອມຕົວຈັ່ງໃດ ກໍ່ປອມບໍ່ໄດ້ດອກຊຸມກ່ອນທັ້ນ 3-4 ຄົນພວກລູກ ທັ້ນ ກອງພັນທີ່ສອງຄືກັນປານນັ້ນ, ທັດສະນະເຈົ້ານີ້ມັນບໍ່ກິນກັບເຂົາດອກ ທັດສະນະເຂົາ ຄືກັນກັບມັນບໍ່ກິນກັບເຂົາ.

ເຄື່ອງຄືກັນແຕ່ເລື່ອງຂອງມັນທັດສະນະທ່າທີມັນບໍ່ຄືກັນ. ເຄື່ອງຄືກັນ ເຂົາຍັງຈຳແນກໄດ້, ເຂົາຕີກັນຢູ່ບ້ານພູຫຸ້ມເດຂອງບຸນພວກເຮົາປີບອີກກະທີກ

ແຕ່ພວກເຮົາກໍ່ແຄນແນ່. ນຸ່ງສິ້ງເສື້ອສອງໂຕປົດສິ້ງເສື້ອຕໍຣະຍີຫັ້ນ, ເຮົານຸ່ງສິ້ງເສື້ອກາກີໃສ່ພວກເບເລ່ແດງ, ບາດນີ້ໃສ່ສິ້ງເສື້ອຕໍຣະຍີໃສ່ພວກແງັບຫັ້ນປີບ. ຕັ້ງແທ້ຈຸບັ້ນຫັ້ນຕີເລີຍພໍ່ເຖົ້າຫັ້ນວ່າບໍ່ໆໆ ບໍ່ໄປກໍ່ໄດ້ບໍ່ຢ້ານດອກ, ບໍ່ຕາຍດອກພວກເຈົ້າອັນນັ້ນ. ເຂົາຮູ້ໃດທັດສະນະ. ອັນໜຶ່ງວ່າຕອນນັ້ນກອງພັນທີ່ສອງຖືວ່າເປັນຜູ້ບັນຊາຫັ້ນ ແມ່ນທ່ານຜູ້ບັນຊາກອງພັນທີ່ສອງ ລະແມ່ນວ່າໜຶ່ງລະຈໍານຽນ, ສອງສວຍ, ສາມລະກະວັດ, ແຕ່ວ່າ ທ່ານຕູ້ຫັ້ນພັນໂທນີ້ເປັນຜູ້ບັນຊາລວມ ແລະ ເພິ່ນບັນຊາລວມຢູ່ກອງປັດໃຈເດ ນັ້ນເພິ່ນບັນຊາລວມ, ຢູ່ກອງພັນພວກລຸງສຸບິນມີແຕ່ເທົ່ານັ້ນ. ໄລຍະຕໍ່ມາລາວຫັ້ນຖືກເສຍຊີວິດຢູ່ຕາດເປີບ. ສາຍເຫດລາວເສຍຊີວິດ, ເອີອັນນັ້ນຈັກໄປເສຍຈັ່ງໃດບໍ່ຮູ້, ແຕ່ວ່າມັນລົງມາບ້ານພຸ້ນເມືອງຄໍາພຸ້ນ. ພໍດີສັດຕູສະກັດຢູ່ຕາດເປີບເດ, ບໍ່ແມ່ນຄືເສັ້ນທາງດຽວນີ້ທາງໄລຍະນັ້ນນີ້ໂອ່ຍຕາດເປີບນີ້ສັດຕູນີ້, ທາກບໍ່ວ່າແຕ່ມັນດອກເຮົາຄືກັນແຕ່ຝ່າຍເຮົາຜູ້ດຽວສາມາດຕີໄດ້ກອງຮ້ອຍໜຶ່ງ, ອັນນັ້ນເຂົາຍິງ, ເລີຍໂຕນຈຶ່ງຕຶກເຫວຫັ້ນເລີຍ, ລົດເລີຍຂວ້າມໄປເລີຍລົດຂວ້າມແລ້ວຈຶ່ງໄປຢຽບເອົາລາວຂອງມັນທາງເປັນແນວນີ້ນ່າ. ຕາດເປີບຫັ້ນໄປກໍ່ເຫັນດອກ. ເພິ່ນກໍ່ສອງເທື່ອແລ້ວ: ເທື່ອໜຶ່ງໄປທ່າໂທມກໍ່ເກືອບແລ້ວເພິ່ນກໍ່ແນວນັ້ນຄືກັນ. ຢູ່ທ່າໂທມຫັ້ນກໍ່ຖືກສັດຕູດັກສະກັດຄືກັນ, ໂຕນັ້ນມັນຄິດເດທາງຄິດແນວນີ້ ສັດຕູສະກັດແລ່ນແນວນີ້, ໂຊເຟີຊີອວ່າຍມານີ້ສັດຕູແມ່ນຍິງຖືກກົງຫຼັງມັນນີ້ ເພິ່ນໂຕນທັນອັນນັ້ນ. ເທື່ອທີສອງຫັ້ນກໍ່ຖືວ່າໂຕນບໍ່ທັນ, ລາວທັນໂຕນລົງແຕ່ວ່າລົດກໍ່ລົ້ມໄປທັບເອົາລາວອີກ.

ຄວາມຈິງສາຍເຫດແທ້ກໍ່ແມ່ນສັດຕູຫັ້ນແຫລະ ອັນນັ້ນແຫລະສາຍເຫດມັນອີ່ຫຼີ. ທ່ານຕູ້ຕາຍນີ້ລະແມ່ນຍ້ອນສັດຕູສະກັດ ບໍ່ແມ່ນຍ້ອນລົດຂວ້າມເອົາເອງແລ້ວໄປຢຽບເອົາເພິ່ນດອກ ອັນນີ້ລຸງສຸບິນກໍ່ບໍ່ຮູ້ແຈ້ງດອກໄດ້ຍິນຂ່າວໝູ່ເວົ້າໝູ່ເຂົາເວົ້າທ່ານຕູ້ເສຍແລ້ວ. ອັນເລື່ອງດີນີ້ໂອ້ທ່ານຕູ້ນີ້ດີທີ່ສຸດ, ສະໄໝຕໍ່ຕ້ານແຕ່ກ່ອນຫວງດວ່າລາວ ພໍສັດຕູມາຮື້ແມ່ນທ່ານຕູ້ກິນຢາກ່ອນຄັນກິນຢາບໍ່ໝົດສາມງອຍແມ່ນບໍ່ທັນຕີສັດຕູ, ກິນໝົດສາມງອຍແລ້ວຈັ່ງຕີແນວນັ້ນ, ເພິ່ນ

ທັ້ນຮອດສີ່ງອຍ [103], ທ່ານໄຟດ່າງໝົດເຈັດງອຍ, ຢາຝິ່ນ, ໜັກໜ່ວງແທ້ໆ. ທ່ານທໍ່ຕູ້ກິນຢາເພິ່ນກໍ່ກິນນຳພະນັກງານບໍ່ມີໃຜ, ບະມີແຕ່ເພຍຫຼວງ, ເພຍຫຼວງຢູ່ເມືອງຣິ່ມນີ້ປະແລ້ວກິນຢາຝິ່ນ.

ຢູ່ວຽງນີຄົນຢູ່ວຽງນີຄົນຫຼາຍແຫລະຈຸເພື່ອນ, ຈຸສີມອນ, ອ້າຍເໝັດ, ເໝັດກໍ່ຕາຍລະ, ແຢັດກໍ່ຕາຍລະຢີຢີມກໍ່ຕາຍແລ້ວ, ຄຳໄລທາຍບະ, ອ້າຍປາ, ໂຮງເລື່ອຍກາຍຈີ່ນາຍໄມ້ໂຮງເລື່ອຍໃຫ່ຍທັ້ນເດ ອ້າຍປາຄົນຈຳປາສັກ. ຄົນລາວລຸ່ມໂຮງເລື່ອຍກາຍຈີນາຍໄມ້ທັ້ນ, ໂຮງເລື່ອຍອີ່ສັງເຂົາເອີ້ນທັ້ນ. ໂຮງເລື່ອຍໄມ້ ອັດຫວິດອັນນັ້ນໂຮງງານຫັດຖະກຳທັ້ນບ່ອນເຂົາເຮັດອັນນີ້ກາຍທີນລົງລຸ່ມ. ລຸງສຸບິນໄປຢາມລາວປີນັ້ນ. ລາວນີ້ຮູ້ທ່ານຕູ້ ຢູ່ນຳກັນລວມລາວພວກລຸງສຸບິນກໍ່ຢູ່ນຳກັນ. ດຽວນີ້ຈັກພັນເອກບໍ, ພົນຈັດຕະວາເບາະ. ອ້າຍອີ່ສັງລຸງສຸບິນພົບເພິ່ນປີນັ້ນ. ຢູ່ກອງປະຊຸມຄັ້ງທີຫ້າທັ້ນເພິ່ນຍັງຢູ່ທັ້ນ. ຄົນຈຳປາສັກຄົນຕ່ຳໆທັ້ນມາ. ແຕ່ກ່ອນເປັນທູດທະຫານຢູ່ກຳປູເຈຍ. ພົມມະຈັກນາມສະກຸນເພິ່ນ.

ອ້າຍຫງຽມນີ້ລາວຍັງໜຸ່ມພັນຕີບໍ, ພົນໄທບໍ, ພົນໂທ, ພົນຈັດຕະວາບໍຫຼືວ່າ, ມື້ນັ້ນເພິ່ນພັນເອກ, ພົມມະຈັກນີ້ແມ່ນນາມສະກຸນກົມກອງດຽວກັນທັ້ນເພິ່ນຮ້ອຍຕີ, ອ້າຍສົມບູນລະແມ່ນຮ້ອຍເອກ, ອ້າຍເສີຍຜູ້ຕາຍຕໍ່ໜ້າສັດຕູທັ້ນຮ້ອຍໂທ.

ປະຈຸບັນນີ້ລາວຢູ່ວຽງທັ້ນ ແຕ່ວ່າບ້ານລາວຢູ່ລຸງສຸບິນພັດບໍ່ຮູ້ພົມມະຈັກນີ້ໄປຖາມໂພນເຄັ້ງ ເຂົາຫາກຮູ້ດອກເອີຖາມໂພນເຄັ້ງທັ້ນ. ເຂົາຈະໄປບອກດອກ. ພົມມະຈັກນີ້ນາມສະກຸນນາຍພົນ ແຕ່ແນ່ນອນແຫລະນາຍພົນເລື່ອງນັ້ນທັ້ນ, ຍິນເຂົາເວົ້າທັ້ນ ພົນຈັດຕະວາ.

ໂອ້ເຜົ່ານັ້ງນີ້ກໍ່ບໍ່ຈື່ເຂົາແລ້ວບໍ່ຈື່ເຂົາເຜົ່ານັ້ງ, ລຸງສຸບິນຢູ່ແຕ່ກ່ອນຢູ່ບ້ານແຫຼ່ງກໍ່ຢູ່ນຳກັນ, ແຕ່ດຽວນີ້ບໍ່ຈື່ແຫລະ.

---

103 ຫົວໜ່ວຍການຊັ່ງຢາພື້ນເມືອງເພື່ອໄຊ້ຈ່າຍ: ງອຍຫຼືຮູບ (ຫົວໜ່ວຍນ້ອຍທີ່ສຸດສຳລັບກິນ)

ຫວ່າງກີ້ນີ້ລຸງສຸບິນເວົ້າຊື່ຜູ້ໜຶ່ງວ່າໝໍເຈີ່ທັ້ນ, ໝໍເຈີ່ເວົ້າເວລາຖືກບາດເຈັບພ້ອມດຽວກັບລຸງສຸບິນແມ່ນຄົນຂະມຸຜີ້ງສາລີ, ທ້າວອັນນຳຄືວ່າຈີເປົ່ານັ້ນແມ່ນເຜົ່າມົ້ງທະຫານສັດຕູ. ທະຫານລຸງສຸບິນທັ້ນຢູ່ນຳເພິ່ນເຜົ່າມົ້ງບໍ່ມີ, ມີແຕ່ຂະມຸນີ້ແຫລະກັບຕະໂອ້ຍ, ກອງພວກລຸງສຸບິນສ່ວນຫຼາຍເຜົ່າຊິນຕະໂອ້ຍ. ບຸນສິນເດຄົນລະແວຢູ່ນຳດຽວ, ລາວຢູ່ພູວົງອັດຕະປື, ກອງພັນທີສອງຄືກັນ.

ອັນນັ້ນແຫລ້ວຍັງວ່າແຕ່ກ່ອນຢູ່ນຳກັນ, ຈູອ້າຍກະລັງນີ້, ອ້າຍແສງດາວ, ໂລມນີ້ກັບສະຫາຍບູ່ນີ້ຜູ້ຕາຍນີ້. ກອງພັນທີ່ສອງແຫລະມີແຕ່ກອງພັນທີສອງ. ດຽວນີ້ຍັງຢູ່ແທ້ກອງພັນທີ່ສອງເດີຜູ້ທີ່ເຂົ້າຮ່ວມນຳກັນແທ້, ລຸງສຸບິນນີ້, ຊັ້ນຄັນແນວນັ້ນຍັງຄຳໝູນນີ້ເຂົາຢູ່ລວມກັນແທ້ໆແຫລ້ວ. ເຂົ້າຮ່ວມທີ່ງໄຫຫິນທັ້ນນະ ເອີ່ຕັນຢູ່ປາກເຊນີ້, ອີ່ຕາຫິນທັ້ນ, ບາດນີ້ບຸນລ້ອມຄົນເສຍອີງຄະຢູ່ຈິນາຍໂມ້ນີ້. ບາງເທື່ອພວກນີ້ຮູ້ ທ່ານຕູ້ໂດຍສະເພາະແມ່ນທ່ານບຸນລ້ອມ ຢູ່ຈິນາຍໂມ້ທີ່ຈະຮູ້ເລື່ອງນີ້, ດຽວນີ້ລາວຢູ່ແຂວງນີ້ແລ້ວ, ບຸນລ້ອມຢູ່ແຂວງຢູ່ທາງປາກຂັນຄຳ, ປາກຫ້ວຍຍາງ, ເອີອັນນັ້ນກອງພັນທີ່ສອງແທ້. ບາດນີ້ຄຳບາງນີ້ກຳມະກອນສະໄໝລາວລວມລາວ, ຄຳບາງໄປເຂົ້າເປັນກຳມະກອນ, ບໍ່ແມ່ນກອງພັນທີສອງລາວໄປຢູ່ຫວຽດນາມ.

ຄຳບາງຢູ່ແຂວງເຊກອງຜູ້ບຳນານດຽວນີ້, ເອີ່ຄຳບາງກັບອ້າຍຄຳບົງເຂົ້າຫວຽດນາມເປັນກຳມະກອນ. ຄຳບາງນີ້ແຫລະ. ຄຳບາງຄົນບ້ານເລັ່ງນີ້ໝວດນັ້ນລະເຂົາໄປລວມເປັນກຳມະກອນຫຼໍ່ປືນທີກສິບນີ້ກໍ່ໄດ້. ໝໍເພື່ອນນີ້ຖາມເບິ່ງ, ສີວອນນີ້ຢູ່ໂພນເຄັ້ງດຽວນີ້ອອກແລ້ວເບາະ, ແຕ່ກ່ອນສີວອນຢູ່ນະໂຍບາຍ, ເຖົ້າເພື່ອນຢູ່ຕະຫຼາດນ້ອຍລຸ່ມໂພນເຄັ້ງທັ້ນ, ມາແຕ່ບ້ານໂພນພະເນົານີ້ເບື້ອງຂວາມີຕະຫຼາດນ້ອຍທັ້ນເດ ຂອບເຂດໂຕນັ້ນ.

ອ້າຍບຸນສິນກໍ່ແມ່ນເຂົ້າໄປເຕົ້າໂຮມຢູ່ທີ່ງໄຫຫິນແລ້ວ ລາວວ່າຂັ້ນຕົ້ນທັ້ນແຫລະ. ລະດັບບໍ່ມີແຕ່ກ່ອນທັ້ນເຂົາກໍ່ເສີຍ. ລຸງສຸບິນກໍ່ເສີຍ. ອັນນັ້ນທະຫານຝ່າຍວຽງຈັນທັ້ນຢູ່ທີ່ງໄຫຫິນທັ້ນເສັງສອບພວກລຸງສຸບິນນີ້ມ້າງອາວຸດແລ້ວປະລົງດິນ, ເຂົາແລະບິບໂມງໃຫ້ປະກອບຄືນຢູ່ທີ່ງໄຫຫິນ.

ແລກປ່ຽນ ແລະ ລຸງສຸບິນກໍ່ຖືກປະກອບຄືນໄວສຸດປະກອບກໍ່ຖືກທັ້ນ ແຫລະຂອງມັນສຳລັບໂຕນີ້ຮຽນກາງຄືນເດ, ສັດຕູກໍ່ຮຽນເຂົາເອີ້ນສັດຕູມັນກໍ່ວ່າ ຮຽນກິນຍາ, ໝວດລຸງສຸບິນກໍ່ຮຽນປີທຶກເດືອນ, ໄດ້ຮຽນຕະຫຼອດເລີຍ, ກາງຄືນ ພວກເພິ່ນກໍ່ຮຽນແນວນັ້ນ, ພວກລຸງສຸບິນນີ້ກໍ່ມັດຕາໃຫ້ມ້າງປືນ, ມ້າງແລ້ວກະ ປະກອບ.

ໄດ້ມ້າງຂອງພວກເພິ່ນຮູ້ແລ້ວ. ເອີພວກເພິ່ນມ້າງອັນນີ້ຈິນຈື່, ແລ້ວ ມ້າງອັນນີ້ປະນີ້, ໂຕໃດພວກເພິ່ນມ້າງກ່ອນທັ້ນ ໃສ່ສຸດທ້າຍແນວນັ້ນໃດ່ມ້າງ ປືນ, ໂຕໃດພວກເພິ່ນໃສ່ເອົາອອກສຸດທ້າຍແລ້ວໂຕນັ້ນເຈົ້າໃສ່ກ່ອນກົດເງານ ມັນແນວນັ້ນທາງໃນທາງນອກ.

ບໍ່ເສັງບໍ່ໄດ້ເກີດເຂດກາງຄືນ ກິດິກາ, ເຕສິບສອງເບາະເອົ້າພວກເພິ່ນ ເຄີຍຮຽນມາມັນກໍ່ຫາກງ່າຍແນ່ເບ 40 ກໍ່ງ່າຍແນ່ພວກເພິ່ນຮຽນເບ 50 ມີອີ່ ຫຍັງບໍ່ມີແຕ່ປືນວິງ ອັນນັ້ນຖ້າແມ່ນວ່າລໍຊໍມັນອ່ອນເອົາໄປເບັດໃໝ່ໃສ່ໃໝ່ ຊິມີ ອີ່ຫຍັງພວກເພິ່ນແປງໝົດແລ້ວ.

ອັນນັ້ນແຫລະລຸງສຸບິນບໍ່ເຂົ້າໃຈ ຈັກຢູ່ໃສຕໍ່ຢູ່ໃສແຕ່ຮູ້ວ່າ ອອກຈາກ ທີ່ງໄຫຫີນນີ້ຫາອິດວ່າຊິນອນບ້ານພ້າ, ພໍດີສັດຕູມາກອງຮ້ອຍສອງຕີ, ພວກລຸງ ສຸບິນພັດລິງຄ້ອຍນ້ຳສຽມທັ້ນ.ພວກລຸງສຸບິນລີງຢູ່ທັ້ນ ຢູ່ແປະກໍ່ໄດ້ຍິນ. ບາດ ຕື່ນຕອນເຊົ້າ ເວລາຮອດກະນຸນທາງແຕ່ຊຽງຂວາງຫາທ່າໂທມທັ້ນ ແມ່ນວ່າຊິ ຕົ້ມເຂົ້າພໍດີສັດຕູມາອີກ, ສັດຕູດຶກກອງຮ້ອຍສາມຕີຂຶ້ນພູບາດນີ້, ເຂົາຕົ້ມເຂົ້າຢູ່ ປ້ອມພູພຸ້ນກິນ, ມັນສະຫຼາດແຕ່ບໍ່ທໍ່ພວກລຸງສຸບິນອັນເລື່ອງມັນ, ພວກລຸງສຸບິນ ລະອອກຈາກທັ້ນໄປແຫລ້ວ, ມື້ທີ່ສອງຮອດບ້ານອັນນັ້ນ, ມັນບໍ່ເຫັນທ່ານຕູ້ທັ້ນ, ມັນຖາມອ້າຍສິມບູນທັ້ນ, ມັນວ່າເຈົ້າທະຫານອີ່ສັງ, ອ້າຍສິມວ່ານີ້ແຫລະພວກ

ເຮົານີ້ນາຍທະຫານຊິມາກວາດລ້າງອິດສະຫຼະແນວນັ້ນ. ພວກລຸງສຸບິນນີ້ແມ່ນທະຫານຄອມມານໂດລາວຕິວະສັດຕູ[104].

ຈັກໜ່ອຍພໍ້ອ້າຍທ່ານຕູ້ມາ, ເອີແກວມັນວ່າ. ພວກລຸງສຸບິນບໍ່ໄດ້ນອນຊ້ຳ, ພວກເພິ່ນເບັດໄປປ້ອມພູພຸ້ນ, ຂອງເຂົາຮູ້ເດໝົດຂອບເຂດນັ້ນເຂົາກໍ່ຮູ້ເດ, ເຂົາຮູ້ທ່ານທ້າວຕູ້ນີ້ພວກລຸງສຸບິນຈັ່ງຕົ້ມເຂົ້ານີ້ໃສ່ໃບຕອງ. ພວກເພິ່ນເອົາໝາກເດື່ອກິນກັບເຂົ້າ, ບໍ່ມີໝໍ້, ກິນແນວນັ້ນແລ້ວ, ຕົ້ມເຂົ້າໃສ່ດິນກໍ່ຕົ້ມແລ້ວລຸງສຸບິນນີ້, ຄວັດຂີ້ດິນເອົາຜ້າຢາງປົກ, ແລ້ວເອົາໃບຕອງປົກດັງໄຟ, ທາງເທິງທາກບໍ່ສຸກ. ລຸງສຸບິນກໍ່ຍອມຄືກັນ ເພິ່ນກິນແລ້ວກໍ່ຈັ່ງຮູ້ວ່າໂອ້ວິທີຄືກັນກັບລຸງໂຮ່ວ່າແຕ່ງເດັກນ້ອຍໄປເອົາໄຟຢາສູບຢາຫັ້ນແຫລ້ວຈະເຮັດວິທີໃດ, ຂອງເດັກນ້ອຍມັນສະຫຼາດ, ມັນເອົາຂີ້ເຖົ່າຫັ້ນໃສ່ນີ້ເອົາໄຟໃສ່ນີ້ໃຫ້ລຸງສູບຢາ. ບິດຮຽນມັນມີແນວນັ້ນ. ມື້ທີສອງ,ມື້ທີສາມ,ມື້ທີ່ສີ່ແຫລະເອື້ອຍອັນນັ້ນອອກລູກ, ລຸງສຸບິນກໍ່ເດີນທາງແຫລ້ວ ໂອ້ເອື້ອຍອັນນັ້ນ ອອກລູກເດຊິເຮັດແນວໃດ ພວກເພິ່ນປຶກສາກັນ. ເອົາໜ້າທີ່ກອງຮ້ອຍສີ່ກອງຮ້ອຍສີ່ ກໍ່ຄືວ່າຫັ້ນແຫລ້ວ ບໍ່ຈັກຫາມແມ່ບໍ່ຈັກລູກຫັ້ນ, ພໍ່ມັນຫັ້ນເຈະ(ເຈ່ຍ), ແມ່ມັນກອງຮ້ອຍສີ່ແຫລະຫາມ, ປະໆບໍ່ໄດ້ແລ້ວ. ຄົນປະຕິວັດນຳກັນເລື່ອງມັນນະໂຍບາຍ, ຄັນບໍ່ກຳແໜ້ນນະໂຍບາຍແມ່ນບໍ່ໄດ້. ຊິອອກທາງຄັງໄຂພື້ແຜນການຂອງພວກເພິ່ນຫັ້ນ, ຫາກຄົນເຈັບຜູ້ໜຶ່ງກັບແພດຊັ້ນສູງຜູ້ໜຶ່ງນີ້ນາຍຮ້ອຍຜູ້ໜຶ່ງຢູ່ລິດຫັ້ນ, ມາລັດເອົາຄົນເຈັບ, ຊັ້ນກໍ່ລຸຍເລີຍຄັງໄຂໄປຫາບ້ານດ່ານ, ໄປຫາໜອງແຮດ. ອ້າຍຈຳນຽນເວົ້າແນວນັ້ນສະເໝີ, ສຸດທ້າຍ ທ່ານໄກສອນຈຶ່ງວ່າ: "ບໍ່, ບໍ່ໃຫ້ນະໂຍບາຍບໍ່ໃຫ້ເຮັດແນວນັ້ນ ອອກດີກວ່າ, ຕາຍກໍ່ຕາຍນຳກັນ". ພວກລຸງສຸບິນຂຶ້ນພູຫຸ້ມ, ຮອດໜອງເປັດ, ໜອງປ່ານຽງຫັ້ນ. ພໍດີລຸງສຸບິນເຫັນໝໍ່ຈຸ່ນບ້ານໜອງປະນຽງ ບາດ

104 ທະຫານຝ່າຍວຽງຈັນໄປນຳທະຫານກອງພັນທີສອງ ຝ່າຍປະເທດລາວຫັ້ນຢູ່ບ້ານ, ເຂົາຖາມ ທ່ານສິມບູນ, ທ່ານສິມບູນກໍ່ຕິວະວ່າເປັນທະຫານກອມມັງໃດ ຝ່າຍວຽງຈັນຄືກັນຊິໄປກວາດລ້າງທະຫານອິດສະຫຼະ, ແຕ່ເມື່ອເຂົາເຫັນທ່ານຕູ້ກໍ່ເລີຍເສຍລັບ.

ນີ້ທ່ານສວຍໝູ່ເພິ່ນວ່າຈຸ່ນຮ້ອຍໂທ[105] ນຶງຢາກຕີກູເບາະ, ນຶງຢາກຕີກໍ່ຕີ, ບໍ່ໆ ໄປ່ໄປ່ໆໆ ມັນໃຫ້ໄປ(ທະຫານສັດຕູ). ໝໍ່ຈຸ່ນແມ່ນທະຫານສັດຕູມັນຊິເຮັດຫາກ ເຮັດບໍ່ໄດ້ຕີ່ກອງຮ້ອຍສອງມາແຫລ້ວ: ໜຶ່ງໝໍ່ສວຍມັນກໍ່ນາຍພັນແລ້ວເດ, ໄປ່ ໆໆໆ! ໄວໆໆ! ໄວຈັ່ງໃດສວຍວ່າບໍ່ແມ່ນມີປືກຂຶ້ນພູຫຸ້ມຫັ້ນ ຂຶ້ນໆລະລົງໄປຫາ ບ້ານລາດແສນ. ລາດແສນຊຽງຂວາງຫັ້ນ. ບໍ່ຢູ່ໜອງແຮດ, ຍັງບໍ່ທັນຮອດດິນ ຫວຽດຊັ້ນ. ບາດນີ້ພວກລຸງ ສຸບິນຊິເຂົ້າປ່າໝົດແລ້ວ, ມັນຫວ່ານໃບປິວວ່າເຊີນ ກອງພັນທີ່ສອງທີ່ມີລະບຽບວິໄນດີມີຄຸນສົມບັດໃຫ້ກັບຄືນສາກັບຄືນສາ. ພໍ່ດີ ອ້າຍຈຳນຽນຊຽນໜັງສື "ມື້ອື່ນດຽວນີ້ກະເຫີນແລ້ວ, ມື້ອື່ນຈັ່ງກັບຄືນ", ລຸງສຸບິນ ຍັງຈື່ວ່າ ເຈັດແປດເກົ້າຮອດບ້ານອັນນັ້ນ. ຄືວ່າຄືນຢູ່ນີ້, ບາດຊິໄປຈັບໂອ້ຍ, ແມ່ນພຸ່ມໄມ້, ຕາຍເປັນແນວໃດບໍ່ເຫັນແລ້ວ,ບໍ່ຈັກທາງງົມແກະຂີ້ຕາ. ຫວິດຫັ້ນ ລະນອນບາດນີ້ໝູ່ນອນໝົດລຸງສຸບິນສອງຄືນກໍ່ມານຳຫຼັງ.

ຕອນນີ້ເຂົາກໍ່ສະແດງ ຢູ່ທໍ່ລະທັດເຫັນແຕ່ຫາກ... ເອົາຄືນໃໝ່, ຄືນ ເກົ່າຫັ້ນ. ບໍ່ມີບ່ອນໃດ, ບ່ອນດຶງຫຍັງຄືນເກົ່າຫັ້ນ, ຄວາມປາກຄວາມເວົ້ານີ້ ແມ່ນເຂົາຕື່ມໃສ່ຕື່ມແມ່ນສົນລະປະວັນນະຄະດີ. ເວົ້າເຖິງຜົນງານຂອງລຸງສຸບິນ ກໍ່ບໍ່ເຫັນຫຍັງ ມີຫຼຽນໄຊອິດສະຫຼະຊັ້ນສອງ ຊັ້ນສາມ ນີ້ສອງ, ອາດຫານຊັ້ນ ໜຶ່ງ, ແຮງງານຊະນະເລີດຊັ້ນໜຶ່ງ, ກະອັນນັ້ນແລ້ວຜົນງານຕົງຈິງທີ່ເຫັນໄດ້ ຂອງເພິ່ນ.

ໃບຍ້ອງຍໍຂອງເພິ່ນນີ້ມີຫົກສິບໃບບໍ່ຕົວະ, ເພິ່ນບໍ່ມີໃບນາມມະຍົດວິລະ ຊົນ, ເພິ່ນວ່າບໍ່ທັນມີໃຜໄດ້. ໂອ້ແປວ່າບໍ່ທັນມີໃບນາມມະຍົດ, ເພິ່ນຢູ່ຈັກມີຈັກ ບໍ່, ບໍ່ຮູ້, ມີຂ່າວປື້ນຂ່າວປ່າວນີ້ຍ້ອນຄຳບຸ່ນດ້ວງປັນຍານີ້ເນາະ ໃນມື້ເປີດກອງ ປະຊຸມໃຫ່ຍຄັ້ງທີໜຶ່ງນີ້ເນາະ ມີທາງຂັ້ນເທິງມອບຫຼຽນໄຊໃຫ້ລຸງສຸບິນຫັ້ນລາວ ອອກຄວາມເຫັນຢູ່ກາງເດີ່ນຫັ້ນລາວໄດ້ຮຽນແລ້ວໝົດ, ສຸດທ້າຍລາວວ່າພິເສດ

---

105 ໝໍ່ຈຸ່ນແມ່ນທະຫານຝ່າຍວຽງຈັນ, ພໍ່ເຖົ້າສຸບິນ ແລະ ລຸງສວຍເປັນທະຫານແນວລາວມັນ ຢູ່ບ້ານໜອງປາໜຽງ (ອະດີດເຂົາເປັນໝູ່ກັນ) ສວຍບອກໃຫ້ໝໍ່ຈຸ່ນຍິງ, ແຮງມັນບອກໃຫ້ໄປ ໄວ.

ຂໍຮຽນລຸງສຸບິນເປັນຕົວແທນນັກຮົບວິລະຊົນແລະນັກຮົບແຂ່ງຂັນ. ແຕ່ທັ້ນໃດ່ຜົນສະຫວັນ (ອອກກ່ອນແລ້ວຂຽນປະຫວັດສາດພວກເພິ່ນກໍ່ຂຽນແລ້ວ) ແຕ່ໝູ່ເວົ້າລຸງສຸບິນກໍ່ບໍ່ຮູ້ເມື່ອດອກ, ຊັ້ນເພິ່ນເວົ້າແນວນັ້ນ. ດຽວນີ້ໃບອັນນັ້ນບໍ່ທັນໄດ້, ແຕ່ວ່າເວົ້າກ່ອນ, ຂອງຜູ້ນີ້ກໍ່ເວົ້າຜູ້ນັ້ນສັນທະລາແຮງຄັກ. ຖືວ່າເວົ້າຍັງບໍ່ທັນມີໃບຢັ້ງຢືນ. ນັ້ນແລ້ວຍັງວ່າ. ແຕ່ລຸງສຸບິນໄປປະຊຸມຢູ່ຕາເວັນອອກນີ້ເພິ່ນໄດ້ໄປເລີຍນັກຮົບແຂ່ງຂັນ, ເລື່ອງປະຊຸມນັກຮົບແຂ່ງຂັນສອງເດືອນກ່ອນທັ້ນ.

ລຸງສຸບິນເຂົ້າຮ່ວມປະຊຸມທັ້ນສີ່ຫ້າເທື່ອ, ທີກເທື່ອນີ້ແມ່ນດັ່ງດີນີ້ແມ່ນລຸງສຸບິນ, ລຸງສຸບິນໄດ້ຫຼຽນໄຊອາດຫານຊັ້ນສາມ, ເທື່ອທີ່ເຈັດແມ່ນຢູ່ປາກເຊນັກຮົບແຂ່ງຂັນ. ບໍ່ມີໃບໃບນາມມະຍົດນີ້ບໍ່ເຫັນມີ. ສິທັນຢູ່ສະຫວັນມີໃບຢັ້ງຢືນນັກຮົບແຂ່ງຂັນອີ່ນັກຮົບແຂ່ງຂັນ. ລຸງສຸບິນເສຍອົງຄະນີ້ທາງກະຊວງສະຫວັດດີການເຂົາເຈົ້າທັ້ນບໍ່ມີຫຍັງ ໂອ໋! ເມຍລຸງສຸບິນດຽວນີ້ຂໍລໍ້ເລື່ອນບໍ ຫຼືລໍ້ຍູ້, ລຸງສຸບິນໄດ້ດຽວນີ້, ຂໍລໍ້ຈັກມີ ຫຼືບໍ່ທັນມີ. ເພາະວ່າຕາມທຳມະດາພວກເພິ່ນທາກໍ່ໄດ້ແຕ່ຄືວ່າຫາກບໍ່ເປັນທາງການ, ວ່າເຂົາເຈົ້າທັ້ນມີນະໂຍບາຍໃຫ້ນັກຮົບເກົ່າທີ່ເສຍອົງຄະນີ້ນາຄືຢູ່ແຂວງຊຽງຂວາງນີ້ ຜູ້ໃດທີ່ວ່າເສຍອົງຄະ, ຕາບອດບໍແຂນກຸດ ຂາກຸດ ເຂົາເຈົ້າມີນະໂຍບາຍເຮັດເຮືອນໃຫ້ເນາະ, ລຸງສຸບິນວ່າ: "ດຽວນີ້ເປັນນຳແຂວງເຮົາບໍເປັນແນວໃດກໍ່ບໍ່ຮູ້. ຢູ່ໃນແຂວງພວກເຮົານີ້ແມ່ນວ່າສອງຄົນເສຍອົງຄະພິເສດ. ໜຶ່ງເຖົ້າທອງຈັນທີ່ຂາກຸດພຽງນີ້ສອງຄົນ, ຜູ້ທີ່ໜຶ່ງລະແມ່ນໝໍລົດບ້ານກົກພຸງທັ້ນ". ເມືອພຸ້ນເມຍເພິ່ນນີ້ລະຢັ້ງຢືນຢູ່ໃນປະຫວັດລຸງສຸບິນຢັ້ງຢືນມື້ນັ້ນກໍ່ແນວນັ້ນ. ລຸງສຸບິນວ່າຄົນເຂົາຖາມວ່າຢູ່ນັກຮົບແຂ່ງຂັນເບາະ ຫຼືວ່ານັກຮົບວິລະຊົນເບາະ. ລຸງສຸບິນເລີຍຕອບຢູ່ໃນຄຳຖາມຂອງເຂົາ, ເຂົາວ່າ: "ອັນນີ້ເບາະ? ເຮົາບໍ່ຈັກແຕ່ເຮົາຢືນໃນແຖວອາວຸໂສ, ວັດເຮັດການປະຕິວັດກ່ອນ 55 ປີ ຄືນຫຼັງ". ນັ້ນເພິ່ນຢັ້ງຢືນ. ເບິ່ງທໍ່ນັ້ນເພິ່ນຢັ້ງຢືນໄດ້ບໍ.

ຂັ້ນເທິງຕີລາຄາການເສຍອົງຄະຂອງລຸງສຸບິນ ແມ່ນປະເພດພິເສດ, ເງິນບຳນານຂອງເພິ່ນ ເດືອນໜຶ່ງພິເສດນີ້ແມ່ນວ່າຂາກຸດສອງຂາ, ຕາບອດສອງເບື້ອງ. ອັນນີ້ລຸງສຸບິນຕາບອດເບື້ອງໜຶ່ງ ແຂນກຸດເບື້ອງໜຶ່ງ, ໃນກໍລະນີ,

ອັນນີ້ນັບແຕ່ວ່າຂາຂຶ້ນໄປຕາບອດເບື້ອງໜຶ່ງ ຫູໜວກເບື້ອງໜຶ່ງແມ່ນພິເສດແລ້ວຂຶ້ນທາງເທິງ, ເອີນັບແຕ່ຄ່ານີ້ລົງມານີ້ອັນນັ້ນເຂົາກໍ່ຕິຊຸມເສນາຮັກຫັ້ນມາກວດ, ລຸງສຸບິນນີ້ຕິກຢູ່ໃນພິເສດ ແຕ່ວ່າເລື່ອງເງິນເດືອນລຸງສຸບິນກໍ່ບໍ່ຈັກ, ແຕ່ວ່າເພິ່ນຮັບງວດໜຶ່ງລ້ານຫ້າ, ໄດ້ລ້ານຫ້າແສນງວດໜຶ່ງ, ຈັກເດືອນບໍ່ຮອດລ້ານຫ້າ, ເດືອນໜຶ່ງສີ່ແສນປາຍແຕ່ຕົວຈິງແທ້ແມ່ນບໍ່ຖືກ, ລ້ຽງລູກເພິ່ນເດ, ເດືອນໜຶ່ງລ້ານຫ້າແສນກິນບວກກັບເມຍເພິ່ນ. ບວກກັບເມຍເພິ່ນແປວ່າເມຍເພິ່ນກໍ່ກິນເງິນເບິ່ງກໍ່ຖາມໂຕສະຫວັດດີການ, ເມຍເພິ່ນມີເງິນເອີ້ນວ່າເງິນບົວລະບັດຜົວອັນນີ້, ແຕ່ເມຍເພິ່ນບໍ່ມີ, ມີແຕ່ເງິນບໍານານ, ລາວເຮັດການປະຕິວັດປົກກະຕິລະມັນມີອັນເງິນດູແລ. ເງິນບົວລະບັດແບບວ່າໃຫ້ຜູ້ທີ່ດູແລຜູ້ເສຍອົງຄະຫັ້ນກິນ, ແຕ່ຫາກເມຍເພິ່ນບໍ່ມີ, ລູກບໍ່ມີ[106], ຄັນເອົາຜູ້ອື່ນມາໃຫ້ຜູ້ອື່ນກິນ, ແຕ່ຄັນມີເມຍແລ້ວໃຫ້ເມຍຂອງເພິ່ນກິນແຕ່ເມຍເພິ່ນບໍ່ໄດ້ຮັບເງິນກິນ, ລາວມີແຕ່ກິນເງິນບໍານານລາວເອງ. ຄວາມຈິງບໍ່ແມ່ນ, ສົມມຸດວ່າລຸງສຸບິນກໍ່ວິລະຊົນ, ເມຍເພິ່ນກໍ່ວິລະຊົນ ແຕ່ວ່າເງິນເດືອນລຸງສຸບິນວິລະຊົນກໍແມ່ນຂອງລຸງສຸບິນ, ຂອງເມຍເພິ່ນກໍຂອງເມຍເພິ່ນກໍ່ໄດ້ຮັບ, ແຕ່ວ່າມາຮອດເຮືອນແລ້ວ ພວກເຂົາກິນກໍສຸດແລ້ວແຕ່ຄອບຄົວແມ່ນບໍ່? ອັນນີ້ຢ້ານວ່າລືມ, ກໍ່ຄິດໄລ່ເບິ່ງ, ອັນນີ້ວ່າທໍ່ນີ້ຊັ້ນວາທີນີ້.

ຕໍ່ຜົນງານອັນຫຍິ່ງໃຫຍ່ຂອງລຸງສຸບິນ ທີ່ໄດ້ເຮັດມາເລືອດຕົກຢາງອອກຈົນສະຫຼະໝົດຊີວິດຄວາມສຸກສ່ວນຕົວຂອງໂຕຫັ້ນນາ, ມາຮອດຕອນນີ້ພັກລັດຍັງບໍ່ທັນໄດ້ຕອບແທນຫຍັງ, ໂຄຕ້າລົດ ໝູ່ກໍ່ເຮັດເສຍບໍ່ໄດ້ຊ້ຳ. ເຮືອນນີ້ມີ, ສຸພີເຮັດຢູ່ສະຫວັດດີການມາຖອກຫີນແຮ່ນີ້ ລົດໜຶ່ງກັບດິນຊາຍລົດໜຶ່ງ, ສຸດທ້າຍຖອກຕອນແລງຕອນເຊົ້າກໍ່ເອົາເມືອ ແລະ ເງິນຊື້ກິນໝົດເລີຍ, ບໍ່ໄດ້ເຮັດ, ເອົາໄວ້ເຮັດເຮືອນວິນລາເວລານັ້ນມັນບໍ່ແພງກໍ່ບໍ່ຢາມັນ. ແປວ່າເຂົາຊື້ເຮືອນໂຕນັ້ນລຸງສຸບິນບໍ່ຢາກຢູ່ເຮືອນໂຕລຸງສຸພີຢູ່ບ່ອນລາວເສຍ, ລຸງສຸບິນບໍ່ຢາກຢູ່ຍ້ອນ

[106] ການນະໂຍບາຍຕໍ່ຜູ້ເສຍອົງຄະພິເສດແມ່ນ: ເງິນລ້ຽງລູກຂອງລາວ, ເງິນຜູ້ເບິ່ງແຍງດູແລລາວ. ແຕ່ສຸດທ້າຍເງິນເມຍບໍ່ໄດ້ຮັບ, ເງິນລ້ຽງລູກພໍ່ແມ່ບໍ່ໄດ້ຮັບໃນປະຈຸບັນ.

ໄຮ່ນາລາວຢູ່ພຸ້ນແລ້ວ[107]. ບໍ່ຢາກຢູ່ແຕ່ສຸພິວ່າຊິເອົາເງິນໃຫ້, ແຕ່ສຸດທ້າຍແມ່ນແນວໃດບໍ່ຮູ້ລະອຽດ. ເງິນລະແນວນີ້ຊື້ເຮືອນຫັ້ນຕາມລຸງສຸບິນເວົ້າ: ລະແມ່ນ 7 ລ້ານແມ່ນສຸພິເຮັດເຮືອນໃຫ້ລຸງສຸບິນ, ລຸງສຸບິນອອກກ່ອນໝູ່ບ່ອນນັ້ນໃດ, ສຸດທ້າຍລຸງສຸບິນບໍ່ໄດ້. ດຽວນີ້ກໍ່ຊື້ເຮືອນສຸພິ ແນວນີ້ລະ ມະຍຸ ມະຍະແຕ່ວ່າຫ້າລ້ານ, ສຸດທ້າຍກໍ່ໃຫ້ສາມລ້ານຊື້ເຮືອນຫັ້ນ, ນອກນັ້ນສຸພິກິນ ລຸງສຸບິນເຈັບໃຈ.

ດຽວນີ້ສຸພິຕາຍແລ້ວເດ! ເງິນເສຍອີງຄະລຸງສຸບິນແປດລ້ານກີບ ສຸພິກິນ. ມາແຕ່ວຽງຈັນ ລຸງສຸບິນໄປຕໍ່ຂາຕໍ່ແຂນ, ພັນເອກບຸນການສະເໜີແຈ້ງ, ອັດຕະປືແປດລ້ານ, ເຊກອງແປດລ້ານ, ມາຮອດດຽວນີ້ລຸງສຸບິນຖາມຈັ່ງໃດກໍ່ບໍ່ໄດ້, ສຸດທ້າຍສຸພິ ສຸພິກໍ່ແພ້ຫຼາຍຫັ້ນແລ້ວຂອງມານີ້ແພ້ຫຼາຍ ເອົາມາເງິນຫັ້ນໝົດກັ່ງງຖືວ່າລາຍເຊັນຫັ້ນ ເຂົາເຊັນມາໃຫ້ລຸງສຸບິນຮຽບຮ້ອຍແລ້ວ, ແຕ່ວ່າເງິນຫັ້ນມາບໍ່ຮອດຊື່ໆ. ແປວ່າລັດຖະບານໄດ້ເອົາໃຫ້ລຸງສຸບິນແລ້ວ ແຕ່ບໍ່ທັນໄດ້ເງິນຊື່ໆ. ແມ່ນລະນາແປວ່າເສຍຢູ່ກອງກາງເຮັຍນຳທາງ.

ຈັກແລ້ວແຂວງໄດ້ເອົາມາແຕ່ພຸ້ນເພິ່ນໄປປະຊຸມເດ, ໝວດລຸງສຸບິນໄປຕໍ່ຂາຕໍ່ແຂນເນ, ມື້ພັນເອກບຸນການລຸລ່ວງ, ໃຫ້ພວກລຸງສຸບິນວ່າເງິນນີ້ບໍ່ແມ່ນເງິນກໍ່ສ້າງ, ເງິນສ້ອມແປງແປດລ້ານ, ອັດຕະປືກໍແປດລ້ານ, ສຸດທ້າຍມາລຸງສຸບິນຖາມກໍມະລຳມະກ່ອຍ. ມື້ລຸງສຸບິນລວມໝົດຈຸບຳນານຫັ້ນເດ ບາດເວົ້າໄປເວົ້າມາລະ ສຸພິຫັ້ນຢ່າເລົ່າຄືນລາວວ່າ. ໂຢ້ລຸງສຸບິນວ່າກ່ອນອື່ນຢາກມີແຜນການຕ້ອງມີບົດສະຫຼຸບຕື່, ຄັນບໍ່ມີບົດສະຫຼຸບເຈົ້າຊິມີແຜນການເປັນບໍ. ລຸງສຸບິນກະເວົ້າແນວນັ້ນແຫລະສຸພິວ່າໂຕຮຽນມາແຕ່ໃສ, ລຸງສຸບິນວ່າເວົ້າແລ້ວຈິງແທ້ແມ່ນແນວນັ້ນ, ຄືວ່າໂຄຕ້າລິດຂອງລຸງສຸບິນຫັ້ນດຽວນີ້ເຂົາວ່າເຂົາໄດ້ແລ້ວຫາກຂາຍແລ້ວ.

ໂຄຕ້າລິດລຸງສຸບິນກະເສຍ, ວ່າລຸງສຸບິນບໍ່ມີເງິນຊິໄປ, ເລີຍໃຫ້ລູກເພິ່ນໄປ. ຢູ່ບ້ານໂພນດີບໍ່ດີຈັບມັນ ມັນວຸ້ນວາຍຫຍັງ. ໂຄຕ້າລິດລຸງສຸບິນຈຶ່ງ

---

107 ເຮືອນຂອງລຸງສຸບິນແຕ່ກ່ອນມີຢູ່ບ່ອນສຸພິຢູ່ແລະເສຍຊີວິດຫັ້ນ ເພາະຮົ້ວສວນສຸພິກໍ່ຢູ່ຫັ້ນ.

ຈະເວົ້າແຈ້ງ, ອີງຕາມການສະເໜີຂອງຜູ້ກຸ່ງວທີ່ວ່າ ສະເໜີປະກອບຊີວະປະຫວັດ, ບາດນີ້ໝໍເສີດຫັ້ນເປັນໝູ່ເກົ່າ ຫຼື ວ່າທາງສະຫວັດດີການຫັ້ນບໍ່ເປັນຜູ້ມອບໝາຍໜ້າທີ່ໃຫ້ເສີດແລ່ນ, ແຕ່ທາງນີ້ ຊິຄິດວ່າສະຫວັດດີການບໍ່ໃຫ້ທ້າວເສີດແລ່ນທ້າວເສີດຮູ້ສາຂາອີສັງຫັ້ນ. ລຸງສຸບິນວ່າ: ເອີຄັນລູກແລ່ນກໍບໍ່ວ່າຫຍັງກໍໃຫ້ແລ່ນມາດຽວນີ້ຊິເຂົ້າສອງປີລະບໍ່ວ່າຫຍັງ, ບໍ່ໃຫ້ຄຳຕອບຖືວ່ານັບຕັ້ງແຕ່ເອົາໃບຂຶ້ນໄປເຂົ້າປະກອບກໍບໍ່ເຫັນໜ້າເຫັນໜວດເລີຍ, ຈັກຊິເຮັດແນວໃດ, ຈັກວ່າໃຜແລ່ນຖືວ່ານິດແຕ່ເດືອນທີກພຸ້ນ ບໍ່ມາຫາລຸງສຸບິນຈັກເທື່ອ. ບາດນີ້ຄັນວ່າບໍ່ແມ່ນສະຫວັດດີການບໍ່ແນະນຳໃຫ້ທາງຜູ້ກຸ່ງວຮັບຮູ້ ນຳວ່າເອີໃບນີ້ຜູ້ກຸ່ງວຍື່ນຮອດກະຊວງລະ ຮອດກົມແຮງງານແລ້ວຍັງຢູ່ພຸ້ນກໍ່ຄືບໍ່ເຫັນເວົ້າໃຫ້ລຸງສຸບິນຮູ້ລະອຽດ.

ໃຫ້ທາງລຸງສຸບິນນີ້ທວງເອົາ, ທາງລຸງສຸບິນນີ້ກໍ່ບໍ່ຮູ້ໜ້າຮູ້ຫຼັງອີກ, ລຸງສຸບິນຖາມຊຸດກ່ອນວ່າເປັນແນວໃດເລື່ອງໂຄຕອກໂຄຕ້າຂອງລຸງສຸບິນນີ້ໄປຮອດໃສແລ້ວ, ໄປໃຫ້ໃຜແລ່ນໂຕເອງກໍ່ວ່າໝູ່ແລ່ນໃຫ້ໝໍເສີດແລ່ນໃຫ້, ກໍ່ຄິດວ່າທາງນີ້ມອບໝາຍໃຫ້ ຄັນຊັ້ນມັນກໍ່ຊິກ້າແລ່ນບໍ່. ບໍ່ແມ່ນໜ້າທີ່ຄັນບໍ່ແມ່ນໜ້າທີ່ມັນ, ຄັນບໍ່ໃຫ້ມັນແລ່ນກໍສະຫວັດດີການມີທິດທາງແກ້ລະຫວ່າການແລ່ນລິດຫັ້ນ, ມັນບໍ່ຖືກບໍ່ແມ່ນໜ້າທີ່ກໍຍຶດເອົາ ກໍມີໃຫ້ເຈົ້າຂອງແລ່ນ. ອັນນີ້ທາງສະຫວັດດີການບໍ່ວ່າສັງ, ເຂົ້າສອງປີລະບໍ່ເຫັນສິ້ນເລີຍ.

ລຸງສຸບິນວ່າຄັນຊິເວົ້າກໍ່ວ່າເວົ້າ, ຈັກໜ່ອຍໝູ່ຊິວ່າກ່າວປະນາມພ້ອງ. ລຸງສຸບິນເວົ້າຕື່ມວ່າ: "ຈິງແທ້ບໍ່ມີກໍ່ນັກຮີບພາລາຄອນນີ້ມາຢາມ. ກົມນະໂຍບາຍຂອງກົມການເມືອງກອງທັບມານີ້ມື້ນັ້ນກໍ່ມາຢາມ ສ່ວນວ່າແຂວງເຮົານີ້ກອງບັນຊາການໜ້າທໍ່ນີ້ວກ້ອຍກໍບໍ່ເຫັນ, ຄະນະປະຈຳແຂວງບໍ່ເຫັນບໍ່ໄປບໍ່ມາກໍ່ໄດ້, ໃຜກໍ່ຊິຕາຍ ຈັກໃຜຕາຍກ່ອນນຳຫຼັງ, ເລື່ອງນີ້ບໍ່ມີໃຜຊິມົ້ມດິນດອກ".

ລຸງສຸບິນເວົ້າອີກ: "ປະຊຸມຕ່າງໆ, ປະຊຸມທາງທະຫານ, ປະຊຸມແນວໂຮມເບາະ, ປະຊຸມແມ່ຍິງເບາະກອງປະຊຸມຕ່າງໆເຂົາເຊີນໃຫ້ໄປປາຖະກະຖາອອກຄຳຄິດຄຳເຫັນເພື່ອວ່າໃຫ້ລູກໃຫ້ຫຼານເບິ່ງວ່າຊີວິດຂອງລຸງເປັນແບບຢ່າງ

ຢູ່ໃນກອງປະຊຸມຢູ່ໃນຂະບວນວິວັດນັ້ນກໍ່ບໍ່ມີ. ໂອ້ມັນຕ່າງກັບສະຫວັນນະເຂດເນາະ!, ດີບໍ່ດີໝູ່ກໍ່ບໍ່ເອີ້ນ, ມື້ນັ້ນອ້າຍສະໝານມາ, ອັນນັ້ນຖາມເອົາໄປຢູ່ພຸ້ນ, ຄັນເອົາໄປກໍ່ໄຄແດ່, ສຸດທ້າຍກໍ່ບໍ່ມາເອົາກໍ່ຊິຍາກອີ່ສັງ, ບໍ່ໄດ້ກິນອີ່ສັງກໍ່ຢ່າ. ຢາກຟັງຂັ້ນເທິງເວົ້າແນວໃດເລື່ອງບັນຫາກິນບັນຫານັ້ນສ່າງດອກ".

ລຸງສຸບິນວ່າ: "ຄວາມຮູ້ສຶກນີ້ອັນອື່ນທັ້ນເຫັນດີແລ້ວ, ອັນນີ້ຢາກເວົ້າໃຫ້ພວກສະຫາຍນ້ອງນຸ່ງລູກຫຼານມາ, ຈັ່ງຊີ້ແລ້ວເຮົາກໍ່ດີອົກດີໃຈ, ເຮົາກໍ່ຖືວ່າພັກລັດບໍ່ແບ່ງ ບໍ່ວາງ ບໍ່ຫ່າງ ບໍ່ເຫີນ, ຢູ່ເລິກຢູ່ໄປປານໃດກໍ່ຕາມມາເບິ່ງມາແຍງເຮົາ, ມາກວດມາກາຊີວະປະຫວັດທັ້ນເລື່ອງຄວາມຮູ້ສຶກ: ອັນອື່ນນີ້ກໍ່ຄືເຮົາເວົ້າລຸກບໍ່ໄດ້ໄປບໍ່ເປັນແລ້ວດຽວນີ້ ກໍ່ອາໄສທາງນີ້ເປັນຜູ້ເບິ່ງຜູ້ແຍງແນວນີ້. ຄວາມຮູ້ສຶກເຮົາກໍ່ດີອົກດີໃຈມ່ວນຊື່ນ. ອັນນີ້ເຮົາຍັງດີເຮົາກໍ່ຊິເຮັດຄືກັນ. ອັນນີ້ອັນຄວາມເຄືອງໃຈໂຕນີ້ເວົ້າອັນໜຶ່ງຢາກສະເໜີເລື່ອງໂຄຕ້າລົດນີ້ແລ້ວສູນກາງບໍ, ມັນເປັນນຳສູນກາງບໍ, ມັນເປັນນຳສູນກາງເບາະ ຫຼືວ່າຊິເປັນນຳແຂວງຂອງພວກເຮົາເບາະ? ເລື່ອງນະໂຍບາຍແນວນັ້ນໜາ ຈຸດໜັກແຂວງພວກເຮົານີ້ນະໂຍບາຍຕໍ່າສຸດຊິເວົ້າແນວໃດກໍ່ເວົ້າ, ບໍ່ແມ່ນເຮົາຢາກເວົ້າ. ກໍ່ຄືກ່ອນນີ້ແຂວງເຮົານີ້ນະໂຍບາຍຕໍ່າສຸດເຂົາແລ່ນນີ້ກໍ່ແລ່ນບັນຫາເງິນ. ບັນຫາເງິນນີ້ເຂົາແລ່ນໄວເລື່ອງນະໂຍບາຍນີ້ບໍ່ໄດ້, ຄັນເຈົ້າຕາຍກໍ່ຕາຍ, ຄັນເຈົ້າເປັນກໍ່ເປັນ. ສະນັ້ນແລ້ວໂຕເອງກິນລະເປັນພໍ່, ມັນບໍ່ຄືສະໄໝກ່ອນ, ເຂົາເອີ້ນວ່າເຮົາເປັນນາຍເຮົາກິນ, ແຕ່ນັກຮົບບໍ່ກິນ. ພວກເຮົາກໍ່ເສຍປຽບແນວນັ້ນໃດ່ ສະໄໝກ່ອນ. ສະໄໝນີ້ບໍ່ເວົ້າແລ້ວເຂົາເອີ້ນວ່າເອົາຕົວລອດເປັນຍອດດີ. ນັ້ນໂຕນິແລ້ວຝືດເຄືອງ. ນະໂຍບາຍບໍ່ມາເບິ່ງມາແຍງກັນອີ່ຫຍັງ. ໂຕນັ້ນໃຈຢາກສະເໜີໃຫ້ຮູ້ຢາກເມືອພຸ້ນນຳເຮົາຢາກພົບອ້າຍສະໝານນີ້ແຕ່ບໍ່ພົບແລ້ວມັນເປັນຈັ່ງຊີ້ແລ້ວ. ຜູ້ໃຫຍ່ກໍ່ມັນຕ່າງຜູ້ໃຫຍ່, ຫາກນັບແຕ່ອອກແຕ່ອັດຕະປືພຸ້ນ ຄືລູກຄືພໍ່ນີ້. ໄປທາງໃດກໍ່ພົບກັນເຫັນກັນ, ຜູ້ໃຫຍ່ກໍ່ມັນຕ່າງຜູ້ໃຫຍ່ເດ, ແນວນັ້ນລະ ບໍ່ໄດ້ພົບເພິ່ນ. ຜູ້ອື່ນນີ້ປະຫວັດ ປະຫວອກທາງນີ້ ບໍ່ຮູ້ດອກໄທເຮົາເສຍອີງຄະນີ້. ເພິ່ນເປັນຜູ້ຊຸກຍູ້ເກົ້າໂມງກາງຄືນອອກຈາກສຳນັກພວກເຮົາແລ່ນແຕ່ປ້ອມພູພຸ້ນ

ຊິມີຫຍັງ ມີແຕ່ເບ 40 ເຮົາຖື, ອັນນັ້ນແລ້ວເຮົາກໍ່ນັບຖືເພິ່ນປານນັ້ນ. ບາດຄູ່ນີ້ນີ້ໂອ່ຍ ໝູ່ຕີນີ້ຕີຫັ້ນ, ຄັນເຮົາຢູ່ດີນີ້ວຽກນີ້ບໍ່ເວົ້າໂອ່ຍ, ບໍ່ວ່າແຕ່ວຽກທະຫານ ວຽກປົກຄອງເຮົາກໍ່ໄປເມືອງນີ້ໄປເມືອງຫັ້ນ ເປີດເອກກະສອກເອກກະສານ, ຫັ້ນມັນເປັນຈັ່ງຊັ້ນແລ້ວຄືເຂົາເວົ້າຫັ້ນ, ຄັນຊິເວົ້າກໍ່ເວົ້າແມ່ຫັ້ນແລ້ວໃຫ້ຮູ້ ເປັນປະຫວັດແລະໃຫ້ຮູ້ເປັນຄຳຂວັນ ຄຳຂວັນກໍ່ເຄີຍເວົ້າ: "ກິນໝາກລືມເຄືອ" ອັນນີ້ປະຈຸບັນມັນເປັນຈັ່ງຊີ້ອີກເອີ້ນວ່າ: "ໄຫໃຫຍ່ວ່າງໄຫກາງເຕັມໄຫນ້ອຍເປົ່າດາຍ" ເນາະແມ່ນບໍ! ອື່ແຕ່ດຽວນີ້ໄຫໃຫຍ່ລົ້ນໄຫນ້ອຍບໍ່ເຕັມ, ແຕ່ດຽວນີ້ໄຫກາງຫັ້ນຕີ່ມັນເຕັມແຕ່ໄຫນ້ອຍແທ້ພວກເຮົາເປັນປະຊາຊົນນອກໆກໍ່ປະລະ. ທຳອິດໄຫໃຫ່ຍລົ້ນໄຫນ້ອຍບໍ່ເຕັມ, ບາດນີ້ກອງປະຊຸມໃຫ່ຍປ່າໄມ້ທົ່ວປະເທດເຮົາກໍ່ໄປຮ່ວມ ທ່ານໄກສອນ ໄດ້ໃຊ້ສັບໃໝ່ອີກ ປີ 87 ທ່ານໄກສອນເວົ້າແນວນັ້ນແຕ່ດຽວນີ້ໄຫໃຫຍ່ວ່າງໄຫກາງລົ້ນໄຫນ້ອຍບໍ່ເຕັມນັບແຕ່ປີ 97. ດຽວນີ້ໄຫໃຫຍ່ລົ້ນອີກກັບຄືນໂຕເກົ່າ ໄຫນ້ອຍບໍ່ເຕັມໄຫໃຫຍ່ວ່າງ ໄຫກາງລົ້ນໄຫນ້ອຍບໍ່ເຕັມນັບແຕ່ ປີ 97 ເອີ 87. ກອງປະຊຸມປ່າໄມ້ທົ່ວປະເທດແນວນັ້ນ" ຄຳຂວັນນີ້ດຽວນີ້ກັບຄືນອີກ ໄຫໃຫຍ່ລົ້ນ ໄຫນ້ອຍບໍ່ເຕັມ ກັບຄືນອີກກັບຄືນໂຕເກົ່າ, ຍຸກນີ້ໄຫໃຫຍ່ລົ້ນໄຫນ້ອຍບໍ່ເຕັມກັບມາຄືນອີກ".

ລຸງຊຽງບຸນ ສີຫາຈັກ

ເຜົ່າຜູ້ໄທ

(ເມືອງເຊໂປນ ແຂວງສະຫວັນນະເຂດ)

ໃນປະຈຸບັນນີ້, ຊຽງບຸນຢູ່ບ້ານທົ່ວຂົວ ເມືອງເຊໂປນ ແຂວງສະຫວັນນະເຂດ, ຊຽງບຸນເປັນຊົນເຜົ່າຜູ້ໄທ. ເພິ່ນເອົາເມຍ ປີ 1955 ຊື່ວ່າ ນາງນອງ, ມີລູກນຳກັນ 5 ຄົນ, ເສຍຊີວິດແລ້ວ 2 ຄົນ ຍິງໜຶ່ງຄົນ ຊາຍໜຶ່ງ (ຍ້ອນສົງຄາມ). ປະຈຸບັນລູກເພິ່ນຍັງຊາຍ 2 ຄົນ ຍິງໜຶ່ງຄົນ. ດຽວນີ້ລູກຂອງເພິ່ນຜູ້ຢູ່ເຮືອນນີ້ ແຕ່ກ່ອນເປັນພະນັກງານພາສີແຂວງ, ລູກໃພ້ເຮັດວຽກຢູ່ທະນາຄານ, ແຕ່ດຽວນີ້ລາອອກໝົດແລ້ວ, ລູກຊາຍເພິ່ນອີກຜູ້ໜຶ່ງຢູ່ຕຳຫຼວດ, ສ່ວນລູກສາວແມ່ນເຮັດວຽກຢູ່ໂຫລະພາບຂະແໜງຖະແຫຼງຂ່າວ, ຍັງບໍ່ທັນແຕ່ງງານ ແລະຍັງເປັນສັນຍາຈ້າງຢູ່. ພໍ່ຂອງລຸງຊຽງບຸນຊື່ວ່າສິນທຳ, ແມ່ຊື່ວ່ານາງສັງ.ເພິ່ນມີອ້າຍເອື້ອຍນ້ອງຄີງນຳກັນທັງໝົດ 11 ຄົນ, ຍິງ 4 ຄົນ, ຊາຍ 7 ຄົນ, ແຕ່ປະຈຸບັນນີ້ ຍັງພຽງ 3 ຄົນ ຍິງ 1 ຄົນເທົ່ານັ້ນ. ນ້ອງສາວຂອງເພິ່ນທີ່ຍັງມີຊີວິດຢູ່ນີ້ກໍ່ເປັນຄົນພິການແຂນກຸດເບື້ອງໜຶ່ງຍ້ອນພະຍາດ.

ຊື່ເພິ່ນແມ່ນຊຽງບຸນ ສີຫາຈັກ, ອາຍຸ 73 ປີ, ເກີດເມື່ອປີ 1931, ທີ່ບ້ານສຸດສະລຸງ, ເມືອງວິລະບູລີ, ແຂວງສະຫວັນນະເຂດ. ການສຶກສາຂອງເພິ່ນບໍ່ໄດ້ຮຽນຈົບຫ້ອງໃດເລີຍ. ຜ່ານມາເພິ່ນມີພຽງແຕ່ອາໃສຮຽນໜັງສືນຳຄູບາອາຈານຢູ່ໃນວັດເທົ່ານັ້ນ ເພາະເວລານັ້ນບໍ່ມີໂຮງຮຽນຊຶ່ງການຮຽນເວລານັ້ນສ່ວນຫຼາຍແມ່ນເພິ່ນຮຽນນິທານພື້ນເມືອງ, ກາບກອນ, ໜັງສືຜູກ, ໜັງສືທຳຕ່າງໆ. ແຕ່ກ່ອນໃນໄລຍະເມືອງອ່າງຄຳໄດ້ປ່ຽນມາເປັນເມືອງວິລະບູລີ. ເວລາເພິ່ນຍັງນ້ອຍ ອາຍຸໄດ້ 9 ປີ ເພິ່ນເປັນສັງກະລີ, ເປັນຊາວໄຮ່ທຸກຍາກ, ທີ່ຢູ່ອາໃສສ່ວນຫຼາຍແມ່ນຮືອນເສົາໄມ້ນອກຕອກໄມ້ບົງນີ້ລະ, ເສົາເຮືອນ 3 ປີໃດກໍ່ຖ່າຍເທື່ອໜຶ່ງ. ຍ້ອນຜົນຂອງການມັກຊອກຮຽນຮູ້ໜັງສືຜູກຕ່າງໆຢູ່ຕາມວັດວາອາຮາມ, ເມື່ອອາຍຸໄດ້ 14 ປີ ເພິ່ນຈຶ່ງໄດ້ໄປບວດຢູ່ວັດອ່າງຄຳ. ຢູ່

ຫັ້ນເພິ່ນໄດ້ມີໝູ່ຄູ່, ເພື່ອນສະຫາຍຫຼາຍຄົນພໍສົມຄວນ, ມີຜູ້ໃຫຍ່ຮອດ 10 ຄົນ ພຸ້ນເພາະເປັນວັດໃຫຍ່ຍາຄູກໍ່ຫຼາຍ. ຈາກນັ້ນມາ ໝູ່ຄູ່ຂອງເພິ່ນລຸ້ນລາວຄາວດຽວກັນກັບເພິ່ນໝົດລະ ພວກເພິ່ນເຂົ້າໄຫວ້ຍາຄູເພື່ອຂໍໄປຮຽນຕໍ່ນັກທຳແຕ່ຍາຄູບໍ່ໃຫ້ເພິ່ນໄປ. ເພາະຍາຄູຮັກລຸງຊຽງບຸນແດ່ ແລະໃນເວລານັ້ນ ເພິ່ນກໍ່ຮຽນເກັ່ງຢູ່, ສ່ວນໝູ່ຄູ່ຂອງເພິ່ນເຂົາໄປຈົບໝົດ, ພໍຢູ່ໄປຢູ່ມາເພິ່ນກໍເລີຍສິກ ເນື່ອງຈາກບໍ່ໄດ້ໄປຮຽນຕໍ່.

ເວົ້າເລື່ອງຊີວິດຄອບຄົວຂອງລຸງຊຽງບຸນແຕ່ຍັງນ້ອຍ, ຕາມແມ່ເພິ່ນເວົ້າໃຫ້ຟັງກ່ອນຊິໄດ້ເພິ່ນນີ້, ແມ່ຂອງເພິ່ນໄດ້ລູກມາເທື່ອໃດກໍ່ມີແຕ່ແມ່ຍິງໝົດ, ບໍ່ມີຜູ້ຊາຍ, ກ່ອນໜ້ານັ້ນແມ່ຂອງເພິ່ນກໍ່ເຄີຍເກີດໄດ້ລູກຜູ້ຊາຍແຕ່ເກີດມາແລ້ວຕາຍ. ແມ່ເພິ່ນຢາກໄດ້ຜູ້ຊາຍ ແມ່ຈຶ່ງແຕ່ງຂັນຫ້າໄປຂໍນຳວັດໃຫ້ໄດ້ລູກຜູ້ຊາຍ, ເມື່ອເກີດເພິ່ນມາ ແມ່ຂອງເພິ່ນດີໃຈ ແມ່ບໍ່ມີຫຍັງເພື່ອສະເຫຼີມສະຫຼອງຫຍັງດອກ, ແຕ່ແມ່ຕັ້ງຊື່ໃຫ້ເພິ່ນວ່າ ບຸນພາມາ, ເພາະແມ່ເພິ່ນຂໍເອົາເດ, ເລື່ອງນີ້ແມ່ນແມ່ເພິ່ນເວົ້າໃຫ້ຟັງ. ຍ້ອນມີຜູ້ຊາຍພຽງຜູ້ດຽວໃນເຮືອນໝົດຢ່າງເພິ່ນຮັກເພິ່ນແພງ. ຕໍ່ມາແມ່ເພິ່ນກໍ່ເກີດນ້ອງຊາຍຂອງເພິ່ນອີກ 5 ຄົນ, ຊຶ່ງເປັນນ້ອງ 5 ຄົນ ທີ່ຕິດເພິ່ນລົງມານີ້ລະ. ລູກພໍ່ແມ່ເພິ່ນຫັ້ນ ມີ 11 ຄົນ, ຕາຍ 5, ຍັງ 6 ຄົນ, ຍິງສາມຊາຍສາມ. ບາດນີ້ນ້ອງຊາຍຜູ້ຖັດເພິ່ນນີ້ເວລາຕໍ່ຕ້ານລາວໄປເຮັດການນຳອິດສະຫຼະຄືກັນ, ໄປຮຽນແພດທະຫານອິດສະຫຼະແລ້ວມາຢູ່ກອງພັນທີ 1 ຢູ່ເມືອງຊຽງເງິນ.

ສ່ວນພໍ່ຂອງເພິ່ນນັ້ນ ລາວເຄີຍບວດເປັນຊຽງຢູ່ວັດຕອນລາວຍັງເປັນໜຸ່ມ. ການບວດເປັນຊຽງ ແຕ່ກ່ອນຄົນບູຮານບໍ່ມີລະດັບຄວາມຮູ້, ບວດກໍ່ຢູ່ວັດຢູ່ວາທຳມະດາ. ພໍ່ເພິ່ນສິກອອກມາສ້າງຄອບຄົວກັບແມ່. ບ້ານຂອງພໍ່ເພິ່ນຫັ້ນແມ່ນຢູ່ບ້ານອ່າງຄຳພີ້, ບໍ່ແມ່ນຢູ່ສິບສະລຸງ. ຫຼັງຈາກພໍ່ເພິ່ນເອົາເມຍຄືແມ່ເພິ່ນນັ້ນ, ພໍ່ກໍໄປຊູ່ເມຍຢູ່ສິບສະລຸງເລີຍ. ເມື່ອອາຍຸລຸງຊຽງບຸນໄດ້ 9 ປີ ເພິ່ນກໍ່ເຫັນພໍ່ໃນອາຊີບເຮັດໄຮ່. ເຮືອນກໍ່ເຮືອນເສົາໄມ້ມອກຕອກໄມ້ລຶມ. ພໍ່ເພິ່ນຫຽວໄປໄຮ່ກັບແມ່ທຸກມື້, ພວກເອື້ອຍໃຫຍ່ຂອງເພິ່ນຫັ້ນຮຸ່ງເຊົ້າມາເຂົາກໍ່ອອກໄປໄຮ່

ເສຍຫຍ້າ, ເພິ່ນລະບອບນຳພໍ່ຢູ່ຖາງໄຮ່, ແລະ ເພິ່ນກໍ່ໃຊ້ເຂົາຕຳເຂົ້າ ແລະ ພັດເຂົ້າເປັນ. ເຖິງຍາມໄຮ່ມາແລ້ວພໍ່ເພິ່ນເອົາຄົກອອກໄປຕຳເຂົ້າຢູ່ໄຮ່. ຜູ້ສາວເບິ່ງລຸງຊຽງບຸນໃຊ້ເຂົ້າ, ພັດເຂົ້າແລະກໍ່ເຮັດວຽກຕ່າງໆ. ແຕ່ລະປີຄອບຄົວຂອງເພິ່ນຈະອຶດເຂົ້າບໍ່ພໍກິນ ສະນັ້ນພໍ່ຈະປະຢັດເຂົ້າແຕ່ລະມື້, ເອື້ອຍນ້ອງພວກເພິ່ນນັ້ນກໍ່ບໍ່ເຄີຍອີ່ມເຂົ້າ. ເພິ່ນຮອດ 14 ປີ ເວລານັ້ນຍີ່ປຸ່ນເຂົ້າມາລາວ, ພໍ່ເພິ່ນມີຖານະເປັນຫົວໜ້າບ້ານ, ຄັນຊິເວົ້າດຽວນີ້ແມ່ນນາຍບ້ານ. ຍີ່ປຸ່ນມາເພິ່ນແຕ່ງໃຫ້ພໍ່ເພິ່ນໄປຮັບຍີ່ປຸ່ນ, ເພິ່ນຍັງຈື່ເວລານັ້ນເພິ່ນອາຍຸ 14 ປີແລ້ວ. ຫຼັງຈາກສົງຄາມຍີ່ປຸ່ນຢູ່ລາວໝົດ, ຍີ່ປຸ່ນກໍ່ກັບຄືນເມືອປະເທດ, ເພິ່ນຈຶ່ງໄດ້ໄປບວດ.

ລຸງຊຽງບຸນເຫັນພໍ່ໄປເຮັດການໃຫ້ຝຣັ່ງເຮັດທາງ, ເສຍສ່ວຍໃຫ້ການ, ເປັນກູລີໃຫ້ຝຣັ່ງ. ເສຍສ່ວຍ ແລະ ເປັນກູລີ ໃຫ້ຝຣັ່ງປີໜຶ່ງ 2 ເທື່ອ. ການເສຍສ່ວຍຫົວຄົນໃນໄລຍະນັ້ນແມ່ນຜູ້ຊາຍ 1 ຄົນ ຈະຕ້ອງໄດ້ເສຍຄ່າຫົວເປັນຄົນລະ 3 ກີບ ຫ້າ ຕໍ່ປີ[108]. ຄອບຄົວເພິ່ນອາວອາລຸງປ້າຂອງເພິ່ນຫຼາຍຄົນຕ້ອງຍ້າຍໄປຢູ່ບົວລະພາພຸ້ນ ເພາະບໍ່ທົນກັບການເສຍສ່ວຍ ແລະ ບັນຫາອຶດເຂົ້າ. ສ່ວນພໍ່ເພິ່ນນັ້ນເຂົາອົດທົນຢູ່, ອຶດເຂົ້າກໍ່ອຶດຢູ່, ແລະມີປີໜຶ່ງຄອບຄົວເພິ່ນອຶດເຂົ້າເອົາແທ້ເອົາວ່າ, ເພິ່ນຕ້ອງໄດ້ໄປຂໍເຂົ້ານຳພີ່ນ້ອງຢູ່ຕາແສງນາເຕີ້ມາກິນ. ໃນປີນັ້ນອຶດທີ່ສຸດຈົນວ່າຕົ້ມເຂົ້າປຽກກິນ.

ໃນຊີວິດຂອງລຸງຊຽງບຸນນີ້ຍ້ອນພໍ່ຮັກແພງເພິ່ນ, ພໍ່ບໍ່ຢາກໃຫ້ໜີໄກ, ເພິ່ນພັດຢາກໄປຮຽນນັກທຳ, ຍາຄູກໍ່ຮັກເພິ່ນເວລານັ້ນ, ອາຍາຄູບໍ່ໃຫ້ໄປ. ບາດນີ້ໝູ່ຄູ່ຂອງເພິ່ນຫຼາຍຄົນເຂົາໄປຮຽນທຳໝົດ ແລະ ກາຍເປັນມະຫາ, ມະຫາຄອນ, ມະຫາຄຳແພງ, ເຂົາເປັນມະຫາໝົດພວກນີ້. ບາດໃຫຍ່ມາແລ້ວອາຍຸໄດ້ 19 ປີ ລຸງຊຽງບຸນຈຶ່ງໄປຢູ່ຜູ້ດຽວໃນວັດ. ໝູ່ໆຂອງເພິ່ນເຂົາກໍ່ອອກໄປເຮັດການປະຕິວັດໝົດແລ້ວ, ເວລານັ້ນລຸງຊຽງບຸນຮ້ອນໃຈຢາກໄປ ເຊັ່ນ

---

108 ເປັນເງິນເກົ່າແລະຫົວໜາມ ແຕ່ສະໄໝກ່ອນສິ້ງເສື້ອຜູ້ຊາຍ ເສື້ອຜູ້ຍິງ ເຜົ່າຜູ້ໄທ ມີແຕ່ຍ້ອມສີດຳນ້ຳນິນ.

ກັນ, ຂອງໝູ່ໄປໝົດແລ້ວ. ເພິ່ນວ່າບໍ່ໄດ້, ເພິ່ນສິກ, ແລ້ວໄປເຮັດການປະຕິວັດ.

ເມື່ອລຸງຊຽງບຸນໃຫຍ່ຂຶ້ນມາພໍ່ແມ່ເພິ່ນເບິ່ງແຍງພິເສດ, ພໍ່ແມ່ບໍ່ຕີບໍ່ຮ້າຍດອກ. ຕອນນັ້ນລຸງຊຽງບຸນກໍ່ມັກຈະຂັດພໍ່ແມ່ເພາະເພິ່ນແພງ, ເປັນຕົ້ນແມ່ນບໍ່ຢາກໄປໄຮ່ບໍ່ຢາກໄປສວນນຳພໍ່, ແຕ່ຕົນເອງກໍ່ຢ້ານພໍ່. ເມື່ອໄປນອນໄຮ່ນອນສວນນຳພໍ່ແມ່ລຸງຊຽງບຸນມັກເຮັດກະດິດກະຕ່ຳ, ເຮັດແຮ້ວ, ເພາະຮຽນເອົານຳພໍ່. ເມື່ອເວລາໄດ້ສັດປ່າ ຫຼື ວ່າອາຫານຕ່າງໆກໍ່ເອົາມາໃຫ້ແມ່ ແລະ ພວກເອື້ອຍໆເຂົ້າຄົວໃຫ້ກິນ, ກິນໝົດຄອບຄົວນັ້ນລະ. ແຕ່ວ່າເພິ່ນໃຫຍ່ມາເພິ່ນກໍ່ບໍ່ໄດ້ເຄີຍໄປນອນນຳໝູ່, ເວລາເພິ່ນໄປຫຼິ້ນໄປຫິວນຳໝູ່ຍາມກາງຄ່ຳກາງຄືນເພິ່ນບໍ່ໄດ້ນອນເຮືອນໝູ່, ມີແຕ່ກັບມານອນເຮືອນໂຕເອງ. ລຸງຊຽງບຸນເຄີຍໄປຫຼິ້ນແອ່ນສາວນຳໝູ່, ແຕ່ວ່າລຳບໍ່ເປັນ, ເປົ່າແຄນກໍ່ບໍ່ເປັນ. ເວລາຢູ່ນຳພໍ່ແມ່ກໍ່ບອກສອນລູກທຸກຄົນວ່າໃຫ້ນັບຖືເຄົາຣົບຜູ້ເຖົ້າຜູ້ແກ່, ຟັງຄວາມເອື້ອຍຄວາມນ້ອງ. ເພິ່ນເປັນຄົນເອົາໃຈໝູ່ ແລະ ບໍ່ກ້າຈະຕີໝູ່ເມື່ອໃດມີບັນຫາໝູ່ເພິ່ນກໍ່ປົບໜີ.

ລຸງຊຽງບຸນຈື່ໄດ້ວ່າເວລານັ້ນ ເພິ່ນມີເຄື່ອງນຸ່ງສິ້ງເສື້ອດຳນ້ຳນິນຄູ່ໜຶ່ງເທົ່ານັ້ນ, ທີ່ແມ່ເຮັດໃຫ້ເພິ່ນ. ເວລາໄປບຸນໄປທານກໍ່ອັນນັ້ນແລ້ວ, ແມ່ເພິ່ນຕ່ຳຫູກແລ້ວກໍ່ມາຫຍິບສິ້ງເສື້ອໃຫ້ພວກເພິ່ນ ແລະ ຫຍິບມຸ້ງນອນ. ສິ້ງທີ່ແມ່ເພິ່ນເຮັດໃຫ້ນັ້ນບໍ່ມີສາຍຢາງມັດຫົວ, ມີແຕ່ເນັບເອົາ ແລະ ເອົາສາຍມັດຫົວສິ້ງໄວ້ເພື່ອບໍ່ໃຫ້ມັນຫຼຸດ. ເພິ່ນເຫັນແມ່ເອົາໃບສະເວງມາປະສົມກັບປູນ, ແຊ່ໄວ້ແລ້ວກໍ່ຕົ້ມເຮັດໝໍ້ນິນ ເພື່ອຍ້ອມສິ້ງເສື້ອໃຫ້ເປັນສີດຳ, ແຕ່ດຽວນີ້ມັນບໍ່ມີແລ້ວສິ້ງເສື້ອແນວນັ້ນທັ້ນມັນໝົດແລ້ວ. ບໍ່ມີແລ້ວ. ແຕ່ກ່ອນເວລາໄປໄຮ່ໄປສວນກໍ່ນຸ່ງອັນນັ້ນແລ້ວ, ເວລາໄປແອ່ນສາວກໍ່ນຸ່ງອັນນັ້ນ, ບາງເທື່ອກໍ່ນຸ່ງເຄື່ອງເຈັກ (ເຄື່ອງຕະຫຼາດ).

ອາຍຸລຸງຊຽງບຸນໄດ້ 14-15 ປີ, ຮູ້ຈັກຈຳແນກແລ້ວວ່າອັນໃດເປັນອັນໃດພ້ອມກັບການສັ່ງສອນຂອງພໍ່ວ່າ: "ສັດຕູມັນຮຸກຮານບ້ານເຮົາເມືອງເຮົາ

ແນວນັ້ນ, ບາດນີ້ເຮົາກໍ່ພາກັນຄຽດແຄ້ນສັດຕູແນວນັ້ນ. ພວກເພິ່ນກໍ່ໄປຟັງນຳພະນັກງານມາຂົນຂວາຍມາໂຄສະນາແນວນັ້ນແນວນີ້. ພະນັກງານຂົນຂວາຍເວົ້າວ່າ ແຕ່ກ່ອນຝຣັ່ງຢູ່ມັນຂູດຮີດ, ເສຍສ່ວຍ, ເສຍຄ່າຫົວໃຫ້ມັນ, ໄປເປັນກູລີໃຫ້ມັນ. ດຽວນີ້ການປະຕິວັດມາແລ້ວ ໄປເຮັດການປະຕິວັດເພື່ອຕ້ານການຂູດຮີດຂອງພວກມັນ. ທຸກໆຄົນແມ່ນຮ່ວມນຳການປະຕິວັດ, ພໍ່ຕ້ອງບອກໃຫ້ລູກຮູ້". ທາງບ້ານທາງເມືອງເພິ່ນກໍ່ສັ່ງສອນແນວນັ້ນ, ແລະຄວາມຈິງແລ້ວພວກເພິ່ນແມ່ນວ່າຮູ້ແຕ່ສຸພານຸວົງ, ແຕ່ກ່ອນເພິ່ນເອີ້ນວ່າ: ເຈົ້າສະເດັດສຸພານຸວົງພາເຮັດການປະຕິວັດ, ພາຕີຝຣັ່ງແນວນັ້ນ. ພວກເພິ່ນກໍ່ວ່າເອີຖ້າພາຕີກໍ່ຕີ. ແນວນັ້ນແລ້ວກ່ອນຄົນຊິອອກໄປເຮັດການປະຕິວັດ.

ໃນໄລຍະລຸງຊຽງບຸນບວດຢູ່ວັດນັ້ນ ເພິ່ນກໍ່ເຄີຍຮຽນມິນນ້ອຍມິນກາງ ແລະ ຮຽນໂຕທຳ, ດຽວນີ້ເພິ່ນກໍ່ລືມແລ້ວຂອງມັນຫຼາຍປີແລ້ວ. ເພິ່ນຮຽນກໍ່ຮຽນສູດແນວນັ້ນແນວນີ້ຫັ້ນແຫລະ, ບໍ່ທັນໄດ້ຮຽນເລີກປານໃດເພາະວ່າຮຽນຢູ່ວັດບ້ານນອກ. ໃນເວລາເພິ່ນຢູ່ວັດນັ້ນ ຕ້ອງປະຕິບັດຕາມຄຳສອນຂອງພະອາຈານ, ຄັນເຮັດຜິດຕໍ່ກັບຂໍ້ຫ້າມຕ່າງໆທີ່ເພິ່ນສອນນັ້ນ ກໍ່ຈະມີອັນໃດອັນໜຶ່ງເກີດຂຶ້ນແກ່ຕົນເອງໂລດລະ, ດັ່ງເຊັ່ນ: ເປັນຂີ້ກາກດັ່ງນັ້ນເພິ່ນໄດ້ເຄົາຣົບນັບຖືຄູບາບໍ່ໄດ້ດີ້ໄດ້ກາຍຄູບາ. ກໍ່ເວລາຢູ່ວັດນັ້ນເອງທີ່ລຸງຊຽງບຸນໄດ້ຮັບຮູ້ຈັກກັບອິດສະຫຼະ ແລະ ເພິ່ນກໍ່ເຂົ້າເຮັດວຽກນຳອິດສະຫຼະເລີຍ. ອິດສະຫຼະມາຕິດຕໍ່ແນວນັ້ນແນວນີ້. ອາຍາຄູທ່ານທອງກໍ່ຮູ້ ແລະ ພົວພັນກັບອິດສະຫຼະ. ດຽວນີ້ກາຍເປັນວັດຮ້າງໄປແລ້ວ ແລະ ບ້ານເກົ່າສຸດສະລຸງຂອງພວກລຸງຊຽງບຸນກໍ່ບໍ່ມີຜູ້ໃດຢູ່ແລ້ວກາຍເປັນບ້ານຮ້າງເຊັ່ນກັນ.

ເມື່ອລຸງຊຽງບຸນໃຫຍ່ຂຶ້ນມາ ເພິ່ນເຫັນພໍ່ແມ່ເພິ່ນມີຄວາຍ 4-5 ໂຕ. ສ່ວນເລື່ອງເຂົ້າກິນນັ້ນປີອຶດປີອີ່ມ, ພໍ່ແມ່ຂອງເພິ່ນຕ້ອງພາລູກໆກິນຫົວກອຍຫົວມັນຕ່າງເຂົ້າ. ບາງເທື່ອກໍ່ໄປຂໍນຳພີ່ນ້ອງຢູ່ບ້ານອື່ນມາແລ້ວຕົ້ມເຂົ້າປຽກກິນ. ປີນັ້ນເປັນປີໃດນັ້ນເພິ່ນກໍ່ບໍ່ຈື່, ແຕ່ກໍ່ເພິ່ນຍັງຄິດເຫັນວ່າພໍ່ພາກິນເຂົ້າປຽກ, ໄປຫາຂຸດຫົວກອຍຫົວມັນມາກິນ. ປີນັ້ນມັນອຶດແຮງແທ້ໆ, ຊາວບ້ານພາກັນໄປ

ຊຸດມັນປ່າມາກິນຕ່າງເຂົ້າ ໃນເວລາອຶດເຂົ້າ. ບາງຄອບຄົວປູກຫຼາຍເມື່ອຜູ້ອື່ນອຶດເຂົ້າກໍ່ມາຊື້ເອົາໄປກິນຕ່າງເຂົ້າ. ເວລານັ້ນຊາວບ້ານລຸງຊຽງບຸນເຂົາໃຊ້ແຕ່ເງິນອັດໄປຊື້ຫົວມັນຕົ້ນ, ຫົວໃຫຍ່ສໍາແຂນຫັ້ນ 5 ອັດ. ແຕ່ລະຄອບຄົວຢູ່ບ້ານເພິ່ນຈຶ່ງປູກມັນຕົ້ນມັນປ່າກໍ່ບໍ່ຊຸດຫຼາຍ, ບາດກິນມັນຕົ້ນຈຶ່ງມີແຮງຖາງໄຮ່ເພື່ອເຮັດເຂົ້າກິນ. ລຸງຊຽງບຸນອອກເຮັດການປະຕິວັດເວລາອາຍຸ 15 ປີ, ໄປເປັນຜູ້ຕິດຕໍ່ເຄື່ອນໄຫວຕ່າງໆໃຫ້ພະນັກງານຝ່າຍປະຕິວັດນັ້ນ, ເພິ່ນໄດ້ເລົ່າສະ ພາບການເຄື່ອນໄຫວຕ່າງໆຂອງພວກສັດຕູທີ່ເກີດຂຶ້ນຢູ່ບ້ານຂອງພວກເພິ່ນໃຫ້ພະນັກງານຂຶ້ນຂວາຍຮັບຮູ້. ຍ້ອນການເຮັດວຽກດັ່ງກ່າວໃຫ້ພະນັກງານລັບນັ້ນ, ເພິ່ນຈຶ່ງຖືກພວກຝຣັ່ງມັນຈັບເຂົ້າຄຸກເປັນເວລາ 15 ວັນ, ພວກເຂົາອ້າງວ່າລຸງຊຽງບຸນໄປພົວພັນກັບພວກທີ່ຢູ່ພູ. ໃນເວລານັ້ນຜູ້ເປັນຕາແສງຢູ່ບ້ານສຸດສະລຸງແມ່ນພໍ່ພິມມາ ຊຶ່ງເພິ່ນເປັນພີ່ນ້ອງຂອງລຸງຊຽງບຸນ(ເປັນອ້າຍຂອງພໍ່ເພິ່ນ), ແລ້ວເພິ່ນໄປຮ້ອງຂໍຕໍ່ວ່າໃຫ້ເຂົາສົ່ງລຸງຊຽງບຸນມາ, ພ້ອມທັງຮັບປະກັນເອົາລຸງຊຽງບຸນໄປຢູ່ເຮືອນນໍາລາວ. ເວລາຕໍ່ມາເຂົາເອົາລຸງຊຽງບຸນໄປຂັງຢູ່ເມືອງຕະໂອ້ຍ, ຈາກນັ້ນອ້າຍຕານຊຶ່ງເປັນອ້າຍຂອງລຸງຊຽງບຸນໄດ້ເອົາທະຫານມາຮັບເອົາລຸງຊຽງບຸນໃຫ້ມາຢູ່ບ້ານຂອງເພິ່ນ. ຫຼັງຈາກທີ່ລຸງຊຽງບຸນກັບມາແຕ່ຕະໂອ້ຍແລ້ວ ເພິ່ນກໍ່ບໍ່ໄດ້ເມືອບ້ານເລີຍ, ເພິ່ນໄດ້ປັກຫຼັກຢູ່ນີ້ຈົນກວ່າຕີປິດໃຫຍ່ທ່າໂຂ່ງແລ້ວ, ແຕ່ເພິ່ນກໍ່ບໍ່ໄດ້ເຮັດຫຍັງດອກໃນເວລາທີ່ສູ້ຮົບກັນນັ້ນ, ເພາະວ່າທາງການເພິ່ນໄດ້ສັ່ງໃຫ້ລຸງຊຽງບຸນກັບຈັນພັນໃນຕອນກາງຄືນວ່າ: ໄປປີດໂຮງຮຽນແລ້ວໃຫ້ເຄື່ອນຍ້າຍໂຮງຮຽນໄປໄວ້ພູແຊງ, ອີກບັນຫາໜຶ່ງແມ່ນພວກລຸງຊຽງບຸນຍັງບໍ່ທັນຮູ້ດີກ່ຽວກັບທີ່ຕັ້ງຂອງປິດທ່າໂຂ່ງ, ຊຶ່ງເວລານັ້ນກໍ່ແມ່ນກະໂຕເຂດເຮືອນລຸງຊຽງບຸນຢູ່ປະຈຸບັນນີ້ລະ. ເຂດນີ້ເປັນເຂດບ້ານນາພິງ ແລະຂົວທ່າໂຂ່ງກໍ່ແມ່ນຂົວເຊບັ້ງໜຽງນີ້.

ຖ້າເວົ້າເລື່ອງການປະຕິວັດ ເວລານັ້ນແມ່ນລຸງຊຽງບຸນໄດ້ມີການເຄື່ອນໄຫວຕັ້ງແຕ່ເວລາເປັນຈົວ, ເພາະວ່າເວລານັ້ນເປັນໄລຍະເວລາທີ່ຝຣັ່ງມາຕັ້ງປິດຢູ່ນ້ຳຈະໂລະ. ສ່ວນພວກລຸງຊຽງບຸນກໍ່ຢູ່ບ້ານອ່າງຄໍາ ຊຶ່ງເປັນບ້ານອິດສະ

ຫຼະແຕ່ບໍ່ໄດ້ເປີດເຜີຍ. ສຳລັບການເຄື່ອນໄຫວຂອງລຸງຊຽງບຸນ ຕອນນັ້ນແມ່ນໄປສືບຂ່າວ, ຕິດຕາມເບິ່ງຝຣັ່ງມີການເຄື່ອນໄຫວແນວໃດຢູ່ນ້ຳຈະໂລະ. ເມື່ອເພິ່ນຮູ້ຂ່າວວ່າຝຣັ່ງອອກຈາກປົດນ້ຳຈະໂລະນັ້ນແລ້ວ, ອາຍາຄູທ່ານທອງກໍ່ເລີຍແຕ່ງໃຫ້ເພິ່ນວ່າ: ໄປແມ່ຈິວ! ໄປສົ່ງຂ່າວໃຫ້ພວກອິດສະຫຼະຢູ່ບ້ານນ້ຳຈະໂລະຮູ້. ການໄປບ້ານນ້ຳຈະໂລະນີ້ເພິ່ນຕ້ອງໄດ້ລອຍນ້ຳ, ນ້ຳມາກເພິ່ນກໍ່ຕ້ອງລອຍ, ເພາະຍາຄູແຕ່ງໃຫ້ເພິ່ນໄປ. ສຳລັບອາຍາຄູແລ້ວເພິ່ນກໍ່ເປັນອາຍາຄູອິດສະຫຼະຄືກັນ.

ຫຼັງຈາກທີ່ລຸງຊຽງບຸນ ສິກໃນປີ 1949, ເພິ່ນໄດ້ຍ້າຍໄປຢູ່ເຂດຍ່ອຍ 912 ຢູ່ບ້ານນາສະເລາະກັບອ້າຍບຸນທາ (ອ້າຍເຂີຍເພິ່ນ ແລະ ລາວໄດ້ເສຍຊີວິດແລ້ວໃນລະຫວ່າງ ປີ 1950 ຫຼື 1952, ລຸງຊຽງບຸນກໍ່ບໍ່ຈື່ຄັກ), ລາວເປັນຄະນະເຂດ ແລະເປັນຄະນະກຳມະການຮັບຜິດຊອບຢູ່ເຂດໃຕ້. ນັບແຕ່ປີ 1950 ເປັນຕົ້ນມາລຸງຊຽງບຸນກໍ່ຢູ່ເຂດຍ່ອຍ 912 ທີ່ຕັ້ງຢູ່ບ້ານນາສະເລາະ, ຢູ່ບ້ານດັ່ງກ່າວນັ້ນ ລຸງຊຽງບຸນກໍ່ມີໝູ່ເພື່ອນພະນັກງານລຸ້ນດຽວກັນຫຼາຍພໍສົມຄວນ. ແຕ່ຕອນນີ້ເຂົາໄດ້ເສຍຊີວິດເກືອບໝົດ, ຍັງເຫຼືອແຕ່ໝໍທອນຊຶ່ງເປັນພະນັກງານການຄ້າແຂວງ ແລະ ເປັນພະນັກງານເຂດຍ່ອຍນຳກັນກັບລຸງຊຽງບຸນ. ນອກຈາກໝູ່ພະນັກງານລຸ້ນດຽວກັນແລ້ວ, ໃນບ້ານນາສະເລາະ ລຸງຊຽງບຸນກໍ່ລຶ້ງເຄີຍກັບໝູ່ເພື່ອນຫຼາຍຄົນ, ເທົ່າທີ່ເພິ່ນຈື່ຊື່ໄດ້ມີຄື: ຊຽງສີນວນ, ທ້າວເຄນ, ທ້າວແໜ່ນ, ທ້າວທອນ, ທ້າວສໍ (ພະນັກງານໜຸ່ມ) ແລະ ທ້າວສີ. ເວລາທີ່ເພິ່ນຢູ່ບ້ານນາສະເລາະນັ້ນ, ເພິ່ນໄດ້ພັກຢູ່ເຮືອນທ້າວສອນ ຄຳວານວົງສາ, ລາວມີນ້ອງສາວໜຶ່ງຄົນ ຊື່ວ່າສາວພາຊຶ່ງຢູ່ໃນໄວສາວ. ເວລາຢູ່ນຳທ້າວສອນ, ລຸງຊຽງບຸນກໍ່ໄດ້ອອກໄປໂຄສະນາເລື້ອຍໆ ຊຶ່ງແບ່ງປັນກັນອອກໄປໂຄສະນາອ້ອມແອ້ມບ້ານນັ້ນ. ຕໍ່ມາ ໃນປີ 1954 ໄດ້ມີການເຊັນສັນຍາເຊີແນວ, ທາງຂັ້ນເທິງກໍ່ຍຸບເຂດຍ່ອຍ, ແລ້ວພວກເພິ່ນພາກັນໄປທ້ອນໂຮມຢູ່ເຂດກາງທີ່ບ້ານນ້ຳກະປໍ້, ພະນັກງານເຂດຍ່ອຍເຂົ້າໄປເຕົ້າໂຮມຢູ່ຫັ້ນໝົດ. ເວລານັ້ນຂັ້ນເທິງກໍ່ໄດ້ເປີດບັ້ນຮ່ຳຮຽນເນື້ອໃນສັນຍາເຊີແນວ. ເມື່ອຮຽນແລ້ວ, ໜ່ວຍ

ຂອງລຸງຊຽງບຸນ ແລະ ທ້າວເວນຖືກໄປເຄື່ອນໄຫວທາງບ້ານທົ່ງກວ້າງນາຄອງ, ໂດຍສົມທົບກັບອີງບ້ານ (ຫວຽດນາມ) ຊຶ່ງລວມແລ້ວໃນໜ່ວຍຂອງພວກເພິ່ນມີທັງໝົດ 6-7 ຄົນ ນັບທັງລາວ ແລະ ຫວຽດນາມ. ສ່ວນທາງໂພນເຫຼັກໂພນເມືອງແມ່ນມອບໃຫ້ນ້ອງແສງເຊໂດນ ເປັນຜູ້ລົງເຜີຍແຜ່ກຽວກັບເນື້ອໃນສັນຍາເຊີແນວ, ຊຶ່ງເຂດນີ້ແມ່ນຂຶ້ນກັບເມືອງໄຊບົວທອງ, ຊື່ຂອງພວກທີ່ໄປເຜີຍແຜ່ນຳກັນນັ້ນ ລຸງຊຽງບຸນຈື່ໄດ້ແຕ່ສະຫາຍຫຼ້າ ແລະ ອີງບານ. ລຸງຊຽງບຸນກັບອີງບານເກືອບຖືກຈັບໄດ້, ຍ້ອນຫຼົງທາງຍ່າງໄປໃສ່ບ້ານອື່ນທີ່ມີທະຫານສັດຕູຢູ່. ເວລາພວກລຸງຊຽງບຸນຍ່າງໄປບ້ານນັ້ນ, ພໍດີພົບປະຊາຊົນແຖວນັ້ນ, ເຂົາຈຶ່ງຖາມວ່າ: ພວກລູກຊິໄປໃສ? ພວກເພິ່ນຕອບວ່າ: ຊິໄປໂຄສະນາຢູ່ບ້ານນີ້ລະ. ປະຊາຊົນຈຶ່ງຮ້ອງຂຶ້ນວ່າ: ໂອຍ! ບໍ່ແມ່ນໆ, ຢູ່ຫັ້ນແມ່ນເຂດສັດຕູຢູ່! ບໍ່ແມ່ນເຂດເຈົ້າ! ພວກລຸງຊຽງບຸນຈຶ່ງພາກັນກັບຄືນ, ຖ້າບໍ່ດັ່ງນັ້ນແມ່ນພວກເພິ່ນຖືກຈັບຢູ່ຫັ້ນແລ້ວ. ຫຼັງຈາກທີ່ພວກລຸງຊຽງບຸນໂຄສະນາທົ່ວແລ້ວ, ທາງຄະນະຮັບຜິດຊອບເຂດທົ່ງກວ້າງນາຄອງໄດ້ສັ່ງໃຫ້ລຸງຊຽງບຸນກັບມາ. ເວລານັ້ນອ້າຍຂັນຊະນະເປັນຫົວໜ້າຮັບຜິດຊອບໃຊ້ແທນເຂົ້າກູ້ຢືມ, ເພາະວ່າເວລານັ້ນລັດຖະບານໄດ້ກູ້ຢືມເຂົ້ານຳປະຊາຊົນ, ເພື່ອຊິເກີດການສູ້ຮົບສົມທົບກັບບັ້ນຮົບດຽນບຽນຟູ (1953-1954). ສ່ວນເຂົ້າກູ້ຢືມນຳປະຊາຊົນນັ້ນແມ່ນຊິເອົາເກືອຢູ່ໃນສາງລະໂບຍ[109] (ສາງເກືອທີ່ຫວຽດນາມເອົາມາ) ໃຊ້ແທນ. ສຸດທ້າຍໝົດກຳນົດກ່ອນ. (1953-1954) ລຸງຊຽງບຸນໄດ້ຖືກເອີ້ນຂຶ້ນມາ, ເພາະຄະນະສາກົນມາກວດຫາແກວ ແລະ ຫາຫວຽດມິນ, ແຕ່ລຸງຊຽງບຸນມາບໍ່ທັນກຳລັງຫວຽດນາມ, ລຸງຊຽງບຸນກໍ່ເລີຍໄປເຕົ້າໂຮມຢູ່ປາກຊາບ (ບ້ານປາກກະຊາບ), ເພາະວ່າພະນັກງານຢູ່ຫັ້ນໝົດ, ແລ້ວພວກເພິ່ນຈຶ່ງຈັດຕັ້ງເປັນກອງ ຮ້ອຍໜຶ່ງເອີ້ນວ່າ: ກອງຮ້ອຍພະນັກງານຊຶ່ງມີພວກເອື້ອຍນ້ອງແມ່ຍິງເຂົ້າຮ່ວມແລະມີຊື່ດັ່ງນີ້: ສາວມອນ ແລະສາວຄຳຫຼ້າ ຈາກແຂວງຄຳມ່ວນ, ສາວຂັນ, ສາວ

[109] ບ້ານລະໂບຍຢູ່ເມືອງບົວລະພາ ແຂວງຄຳມ່ວນ, ປີນັ້ນປະຊາຊົນອຶດເກືອກິນໄດ້ໄປເອົາເກືອຢູ່ສາງລະໂບຍ.

ສ້ອຍ, ສາວທິ່ມ ແລະຜູ້ອື່ນໆເຂົ້າເປັນພະນັກງານເພດຍິງ ແລະ ເປັນກອງປຸກລຸກຂອງເຂດ. ເມື່ອສູນກາງຈັດຕັ້ງເປັນກອງຮ້ອຍໜຶ່ງ ແລ້ວພວກເພິ່ນ ຈຶ່ງຮຽນເດີນທາງ. ຫົວໜ້າກອງຮ້ອຍນັ້ນ ແມ່ນອ້າຍຄຳເພືອນ ຕຸນາລົມ[110] ແລະຜູ້ຮອງແມ່ນສະຫາຍບຸນມາ ຢູ່ໂຮງໝໍເມືອງພິນ, ປະຈຸບັນສະຫາຍກໍ່ຍັງມີຊີວິດຢູ່, ແຕ່ລາວກໍ່ເຖົ້າແກ່ແລ້ວ, ຜົມກໍ່ຫງອກຈູນພູ່ນ ແລະລາວກໍ່ອອກ ກິນບຳນານແລ້ວ. ຈາກນັ້ນ ເພິ່ນໄດ້ລຸລ່ວງໃຫ້ລຸງຊຽງບຸນຮູ້ວ່າ, ຮຽນການເດີນທາງເພື່ອໄປເຕົ້າໂຮມກັນຢູ່ເຂດເຕົ້າໂຮມຊົ່ວຄາວນັ້ນ, ທັງໝົດເຂດກາງແມ່ນໃຫ້ມາໂຮມກັນຢູ່ນີ້ເປັນເວລາ 45 ວັນ. ຫຼັງຈາກນັ້ນທາງຂັ້ນເທິງໄດ້ແຕ່ງຕັ້ງໃຫ້ທ່ານຄຳໄຕເປັນຫົວໜ້າ ເພື່ອນຳພາອອກເດີນທາງໄປເຕົ້າໂຮມຢູ່ຊຳເໜືອ (ເຂດເຕົ້າໂຮມຊົ່ວຄາວເມື່ອກ່ອນແມ່ນຕັ້ງຢູ່ນ້ຳກະປໍ້). ໃນຂະນະທີ່ພວກລຸງຊຽງບຸນຢູ່ເຕົ້າໂຮມຊົ່ວຄາວນັ້ນ, ທາງຂັ້ນເທິງໄດ້ໂອ້ລົມກັບລຸງຊຽງບຸນດັ່ງນີ້: "ພວກເພິ່ນໄປເຕົ້າໂຮມຢູ່ຊຳເໜືອ ແລະ ຜົ້ງສາລີ ແມ່ນເພື່ອລໍຖ້າຈັດຕັ້ງລັດຖະບານປະສົມໃຫ້ໄດ້ປີໜຶ່ງປີປາຍກ່ອນ, ແລ້ວພວກຊຽງບຸນຈຶ່ງເຂົ້າທາງວຽງຈັນ ເພື່ອເຂົ້າຮ່ວມກັບລັດຖະບານເລີຍ". ລຸງຊຽງບຸນໄດ້ເວົ້າກັບໝູ່ເພື່ອນວ່າ: ພວກສະຫາຍອ້າຍນ້ອງບໍ່ຕ້ອງອຸກອັ່ງດອກ, ເພິ່ນໄປຊົ່ວຄາວເພື່ອຮຽນການເດີນທາງ ແລະ ໂຄງສ້າງສາກົນ. ສະຖານທີ່ຮຽນແມ່ນຢູ່ພະນົບລັງຄັງ[111] ແລະ ຢູ່ຫັ້ນເພິ່ນໄດ້ກວດຫາຄົນ ເພື່ອໄປຮຽນວິທີຖາມ, ວິທີສາກົນຖາມ, ວິທີສາກົນຕອບ ແລະ ເພິ່ນຖາມແນວໃດເຮົາຕອບແນວໃດ. ຄະນະສາກົນເປັນຄົນຕ່າງປະເທດຄື: ໂປໂລຍ, ການາດາ, ອິນເດຍ ແລະ ອື່ນໆ..... ພໍດີລຸງຊຽງບຸນຮຽນຈົບແລ້ວ, ຢູ່ໄປຢູ່ມາເພິ່ນເລີຍບໍ່ຖືກໄປຮຽນຕໍ່, ເພາະຂັ້ນເທິງຄັດເລືອກໃຫ້ພະນັກງານພື້ນຖານຢູ່ 10 ແຂວງເພື່ອຕໍ່ສູ້ການເມືອງແບບຖືກກົດໝາຍເຄິ່ງກົດໝາຍ. ເມື່ອລຸງຊຽງບຸນບໍ່ຖືກໄປຮຽນ, ເຄື່ອງຂອງທີ່ເຂົາເບີກໃຫ້ເພິ່ນກໍ່ສົ່ງ

---

110 ລຸງຄຳເພືອນ ຕຸນາລົມ ດຽວນີ້ເຖົ້າແລ້ວ, ແຕ່ກ່ອນເພິ່ນເປັນທູດທຳອິດຢູ່ໂຊວຽດ.

111 ພະນົບລະຄັງຢູ່ໃກ້ຊາຍແດນລາວ-ຫວຽດ ທີ່ເມືອງບົວລະພາ ແຂວງຄຳມ່ວນ.

ເຂົາຄືນໜົດ (ເຄື່ອງຈີນສະໄໝນັ້ນ). ສາຍເຫດທີ່ເພິ່ນບໍ່ໄດ້ໄປຮຽນນັ້ນຂັ້ນເທິງ ເວົ້າວ່າ: ສະຫາຍບາງເທື່ອກໍຍາກແລະບາງເທື່ອກໍ່ຖືກຈັບ. ເມື່ອເປັນແນວນັ້ນ ລຸງຊຽງບຸນຈຶ່ງກັບມາບ້ານສຸດສະລຸງ, ເຂດວິລະບູລີ, ຕາແສງອ່າງຄຳ (ດຽວນີ້ ເປັນບ້ານຮ້າງແລ້ວ). ເມື່ອເພິ່ນມາຮອດບ້ານຕອນທຳອິດ ພໍ່ເພິ່ນເປັນໄຂ້ ແລະ ໄຂ້ໜັກຂຶ້ນເລື້ອຍໆ, ຈົນເຖິງຂັ້ນເສຍຊີວິດ. ຊີວິດຂອງລຸງຊຽງບຸນຕອນນັ້ນ ແມ່ນຍາກລຳບາກພໍສົມຄວນ, ນ້ອງຊາຍເພິ່ນກໍ່ເຂົ້າບວດ, ເອື້ອຍເພິ່ນກໍ່ຍາກ ລູກນ້ອຍ ແລະ ແມ່ກໍ່ເຖົ້າແກ່ແລ້ວ. ໃນຊ່ວງດຽວກັນນີ້ພໍດີຕາແສງອ່າງຄຳມາ ຢາມເຮືອນເພິ່ນ, ເພິ່ນເລີຍສະເໜີໃຫ້ຕາແສງຮູ້ວ່າ: ຊຽງບຸນເອງໄປເຮັດການ ມາກໍ່ຖືວ່າດົນນານພໍສົມຄວນແລ້ວ, ບັດນີ້ພໍ່ຂ້ອຍກໍ່ເສຍຊີວິດແລ້ວ, ລຸງຊຽງບຸນ ກໍ່ເລີຍຖາມເພິ່ນວ່າ: ຊຽງບຸນຢາກຢູ່ບ້ານນີ້ຢູ່ໄດ້ບໍ່? ລຸງຊຽງບຸນຖາມແນວນັ້ນກໍ່ ເພາະວ່າລາວເປັນພີ່ນ້ອງ(ເປັນອາວຂອງລຸງຊຽງບຸນ). ຕາແສງຕອບວ່າ: ອາວ ຊິໄປປຶກສາກັບຕາແສງພີ່ນ້ອຍກ່ອນ ແລ້ວອາວຈະມາບອກ, ຖ້າຢູ່ໄດ້ອາວຊິໃຫ້ ຢູ່ ຖ້າຢູ່ບໍ່ໄດ້ອາວຊິບອກໂຕນໜີ. ເພິ່ນມາປຶກສານຳຕາແສງພີ່ນ້ອຍ, ແລ້ວ ມາບອກລຸງຊຽງບຸນວ່າ: ໂຕຢູ່ບ້ານນີ້ໄດ້, ເພາະບໍ່ມີຊື່ໂຕໄປເປັນອິດສະຫຼະ. ທີ່ ບໍ່ມີຊື່ໄປອິດສະຫຼະນັ້ນກໍ່ເພາະວ່າ ລຸງຊຽງບຸນອອກຈາກເຮືອນໄປແລ້ວ, ເພິ່ນກໍ່ ໄປຄຳມ່ວນພຸ້ນເລີຍ, ບໍ່ໄດ້ເຄື່ອນໄຫວຢູ່ເຂດນີ້ເຂົາຈຶ່ງບໍ່ຮູ້ຈັກວ່າເພິ່ນໄປເປັນ ອິດສະຫຼະ. ດັ່ງນັ້ນ, ເພິ່ນຈຶ່ງຢູ່ບ້ານນີ້ເຮັດໄຮ່ເຮັດນາ, ເມື່ອອາຍຸ ໄດ້ 24 ປີ ເພິ່ນຈຶ່ງໄດ້ສ້າງຄອບຄົວປີ 1955.

ການເຄື່ອນໄຫວທາງລັບຂອງຝ່າຍປະຕິວັດ ຍັງໄດ້ສືບຕໍ່ຂະຫຍາຍພື້ນ ຖານອອກໄປທາງປົດຈະໂລະ, ໄປທາງນ້ຳບາກ ແລະ ໄປທາງນ້ຳກະປໍ້. ໃນ ເວລານັ້ນເຂົາຍັງບໍ່ທັນຮູ້ວ່າລຸງຊຽງບຸນເປັນອິດສະຫຼະຊ້ຳ, ເພາະເປັນພະນັກ ງານທາງລັບແດ່, ຊຶ່ງຕອນນັ້ນລຸງຊຽງບຸນໄດ້ເຄື່ອນໄຫວຢ່າງເນື່ອງນິດລຽນຕິດ. ພໍຮອດຍາມເລືອກຕັ້ງຜູ້ແທນໃນປີ 1958 ທ່ານສີຊະນະ ສີສານ ໄດ້ມາສະ ໝັກຢູ່ແຂວງສະຫວັນນະເຂດ, ສຳລັບໜ່ວຍປ່ອນບັດບ້ານອ່າງຄຳ ແມ່ນໜ່ວຍ 15, ມີສະມະຊິກມາຈາກ 2 ແຂວງເລືອກຕັ້ງ. ຕອນນີ້, ໃກ້ຊິເປີດເຜີຍແລ້ວ!

ລຸງຊຽງບຸນໄດ້ຖືກຕາງໜ້າໃຫ້ແນວລາວຮັກຊາດ ມາສັງເກດການປະຈຳໜ່ວຍປ່ອນບັດ 15 ບ້ານອ່າງຄຳ, ຊຶ່ງໄດ້ມີໜັງສືຈາກເຈົ້າເມືອງບຸນເລີງ ຕີຕາຄັກແນ່ເພື່ອອະນຸຍາດໃຫ້ລຸງຊຽງບຸນໄດ້ເຮັດວຽກໃນຊຸດນີ້. ເມື່ອພວກສັດຕູຮູ້ຄືແນວນັ້ນແລ້ວ, ເຂົາກໍ່ກຽມຂີຂ້າເພິ່ນກັບທ້າວແຂກຜູ້ເປັນອ້າຍເມຍຂອງເພິ່ນກ່ອນໃນວັນປ່ອນບັດ, ເພາະວ່າທ້າວແຂກເປັນຜູ້ໄປເອົາບັດສຸວັນນະວົງຢູ່ວຽງຈັນມາຢາຍຕາງໜ້າໃຫ້ສາລະວັດ. ພໍ່ເຖົ້າຂອງລຸງຊຽງບຸນ (ພໍ່ເມຍ) ຂັດຂ້ອງບໍ່ຢາກໃຫ້ລຸງຊຽງບຸນໄປປ່ອນບັດ ເພາະໄດ້ຍິນວ່າໝູ່ຊິຂ້າ. ແຕ່ພໍ່ເຖົ້າເພິ່ນຍັງເວົ້າຢ້ຳອີກວ່າ: ຈຳເປັນແລ້ວລູກເອີຍຂັ້ນເທີງເພິ່ນສັ່ງມາຕາຍກໍຕາຍຫັ້ນແລ້ວ. ລຸງຊຽງບຸນກໍຕັດສິນໃຈໄປປ່ອນບັດ. ຫຼັງຈາກນັ້ນກໍ່ກວດຄະແນນສຽງແຕ່ບໍ່ສຳເລັດໃນຕອນກາງເວັນ, ພວກເພິ່ນຈຶ່ງໄດ້ສືບຕໍ່ກວດກາຈົນຮອດເດິກດື່ນທ່ຽງຄືນແລ້ວ ຄະນະກຳມະການຜູ້ກວດບັດຈຶ່ງຢຸດໄວ້.ລຸງຊຽງບຸນເລີຍຖາມຕົນເອງວ່າ: "ຂ້ອຍຊິເຮັດແນວໃດບາດນີ້, ເພາະໃກ້ຊິແຈ້ງແລ້ວ". ເພິ່ນກໍ່ເລີຍໄປລີ້ນອນຢູ່ເຮືອນພີ່ນ້ອງທີ່ບ້ານອ່າງຄຳ. ຜົນຂອງການກວດຄະແນນສຽງປະກົດວ່າ ທ່ານສີຊະນະ ສີສານ ໄດ້ຄະແນນຫຼາຍກວ່າໝູ່. ຈາກນັ້ນລຸງຊຽງບຸນກໍ່ລົງມາເຊໂປນເພື່ອລາຍງານຜົນຂອງການຄັດເລືອກຜູ້ແທນໃຫ້ຄະນະຮັບຜິດຊອບການເລືອກຕັ້ງ. ສ່ວນຄະນະຮັບຜິດຊອບການປ່ອນບັດຢູ່ເຊໂປນ ແມ່ນທ້າວນອນຄຳ ແລະ ບຸນທຽງ. (ທ້າວໂອ ແມ່ນຍາໂອ, ທ້າວນອນຄຳ ແມ່ນນ້ອງຊາຍຂອງຍາໂອ). ເມື່ອການປ່ອນບັດສຳເລັດຮຽບຮ້ອຍແລ້ວ, ລຸງຊຽງບຸນກໍ່ກັບເມືອບ້ານ. ຫຼັງຈາກນັ້ນສັດຕູຮູ້ວ່າພວກເພິ່ນເປັນອິດສະຫຼະ ແລະຮູ້ການເຄື່ອນໄຫວຂອງພວກເພິ່ນ, ເຂົາຈຶ່ງຫາວິທີດຳເນີນຈັບພວກເພິ່ນ. ໃນປີ 1959 ສັດຕູໄດ້ຈັບພັນເອກບຸນທຽງ, ຊຽງສີນວນ, ທ້າວບຸນເກດ ແລະພະນັກງານພື້ນຖານຈຳນວນໜຶ່ງ. ໃນເວລາດຽວກັນນັ້ນ ລຸງຊຽງບຸນກໍເກືອບຖືກຈັບ, ເພິ່ນບໍ່ຮູ້ຊິເຮັດແນວໃດດີ, ເພິ່ນຈຶ່ງຕັດສິນໃຈໂຕນໄປສະຫວັນນະເຂດ ຊຶ່ງຕາມແຜນການແມ່ນເພິ່ນຊິໄປລີ້ຢູ່ເຮືອນອ້າຍສີຊະນະ ສີສານ. ເມື່ອລຸງຊຽງບຸນໄດ້ພົບລຸງສີຊະນະ ສີສານແລ້ວ, ລຸງຊຽງບຸນກໍ່ເລີຍບອກລຸງສີຊະນະວ່າ: "ອ້າຍສີຊະນະເອີຍ ຂ້ອຍເກືອບຖືກຈັບໃດນີ້ແຕ່ໂຊກ

ດີຂ້ອຍລອດມາໄດ້". ຢູ່ທີ່ເຮືອນລຸງສີຊະນະ ສີສານ, ລຸງຊຽງບຸນໄດ້ພົບລຸງຕຸລັນ ຊຶ່ງເພິ່ນໄດ້ບອກລຸງຊຽງບຸນວ່າ: "ພວກສະຫາຍຢູ່ບ້ານນີ້ບໍ່ໄດ້ດອກເພາະມັນແມ່ນຕົວເມືອງ, ສັດຕູຫາຈັບໄດ້ງ່າຍ. ພວກເຈົ້າຈຶ່ງພາກັນກັບເມືອຢູ່ບ້ານນອກພຸ້ນດີກວ່າ, ຖ້າວ່າຢູ່ບ້ານບໍ່ໄດ້ກໍ່ໃຫ້ພາກັນໄປຢູ່ປ່າພຸ້ນເດີ". ເມື່ອໄດ້ຍິນລຸງຕຸລັນເວົ້າຄືແນວນັ້ນ, ລຸງຊຽງບຸນຈຶ່ງຄິດອອກວ່າແມ່ນໃດເນາະ. ຈາກນັ້ນເພິ່ນກໍ່ກັບມາຢູ່ບ້ານສຸດສະລຸງນັ້ນລະ, ແລ້ວກໍ່ເລີ່ມຫັນທິດ ເພາະເສຍລັບແລ້ວ; ເມື່ອເປັນແນວນັ້ນ ອ້າຍກອງມາຜູ້ຕາງໜ້າແນວລາວອິດສະຫຼະໄດ້ອອກຄຳສັ່ງໃຫ້ພວກລຸງຊຽງບຸນຫັນທິດດຽວນີ້, ໂດຍເອົາການຕໍ່ສູ້ທາງການທະຫານ ກັບການເມືອງໄປພ້ອມໆກັນ. ຈາກນັ້ນລຸງຊຽງບຸນກໍ່ອອກໄປເຄື່ອນໄຫວທາງເມືອງບົວລະພາ ຊຶ່ງທຳອິດແມ່ນບໍ່ທັນມີອາວຸດຫຍັງຫຼາຍເທື່ອ, ມີພຽງປືນອັງເລກະບອກໜຶ່ງເຊັ່ນ: ຊຽງທອງແດງ, ສີຈັນແລະຜູ້ອື່ນໆແມ່ນອອກໄປເຕົ້າໂຮມຢູ່ບົວລະພາພຸ້ນແລ້ວ. ພວກເພິ່ນຖາມກັນວ່າ: ຊິເຮັດແນວໃດ? ບໍ່ມີປືນ! ທາງຫວຽດນາມກໍ່ບໍ່ທັນຕອບສະໜອງໄດ້. ທາງກອງບັນຊາການຂອງອ້າຍອິນໄດ້ສົມທົບກັບກອງບັນຊາການທະຫານແຂວງຄຳມ່ວນ ແລະ ຂັ້ນເທິງເພິ່ນຈຶ່ງມີແຜນໄປຢືມປືນນຳທະຫານປະຕິສັງຢູ່ຕາແສງຊຸນເຊ ໄດ້ປະມານ 10 ກວ່າກະບອກ, ແລ້ວຈຶ່ງມາຕໍ່ສູ້ກັບສັດຕູຈົນຕີໄດ້ປົດລະໂບຍ ແລະ ຍຶດປືນມາໄດ້ອີກຈຳນວນໜຶ່ງ. ຕໍ່ມາພວກເພິ່ນກໍ່ສາມາດຕີ ແລະ ຍຶດເມືອງບົວລະພາໄດ້ອີກ, ແລ້ວຈຶ່ງປະກາດເປັນເຂດອິດສະຫຼະ ໃນປີ 1959-1960. ແຕ່ຕອນນັ້ນລຸງຊຽງບຸນບໍ່ໄດ້ເຂົ້າຮ່ວມຂະບວນການນຳເຂົາ. ຕໍ່ມາຈຶ່ງໄດ້ມີການຈັດຕັ້ງແຂວງສະຫວັນນະເຂດກັບແຂວງຄຳມ່ວນຂຶ້ນ ເພື່ອເປັນບ່ອນເຕົ້າໂຮມກຳລັງ. ເວລານັ້ນພໍ່ຄຳເຜີຍ (ອ້າຍຈ່າຍິດ) ຄົນບ້ານອາງຄຳ ມີຕຳແໜ່ງເປັນຄະນະເມືອງໄດ້ແຕ່ງຕັ້ງໃຫ້ລຸງຊຽງບຸນເປັນພະນັກງານເມືອງ (ບໍ່ທັນເວົ້າເລື່ອງເຈົ້າເມືອງເມືອງເຊໂປນເວລານັ້ນຍັງປິດລັບ). ຈາກນັ້ນສັດຕູໄດ້ໄປຕັ້ງປົດຢູ່ບ້ານອາງຄຳ (ທະຫານຝ່າຍວຽງຈັນ), ສ່ວນທາງພວກລຸງຊຽງບຸນກໍ່ໄດ້ແບ່ງໜ້າທີ່ກັນເຮັດດັ່ງນີ້: ໝູ່ຊຽງທອງແດງກັບໝູ່ລຸງຊຽງບຸນໄດ້ຖືກແຕ່ງຕັ້ງໃຫ້ເປັນນັກສືບ, ສ່ວນໝູ່ຂອງ

ສະຫາຍສີຈັນ ເປັນໜ່ວຍຕະລຸມບອນ,ແລ້ວພ້ອມກັນຕີປິດຈີນສຳເລັດ. ລຸງຊຽງບຸນ ແລະອ້າຍອິນກອງ ທີ່ເປັນຜູ້ບັນຊານັ້ນ ຈຶ່ງໄດ້ກັບເມືອງ, ແຕ່ທາງສັດຕູກໍ່ຍັງບຸກລຸກໄປບຸກລຸກມາຢູ່, ມັນບຸກອ້າຍນ້ອງລຸງຊຽງບຸນຢູ່ບ້ານຫ້ວຍຮ່ອງ ແລະເຂົາຢຶດເຄື່ອງລຸງຊຽງບຸນໄດ້ຈຳນວນໜຶ່ງ ຊຶ່ງໃນນັ້ນລຸງຊຽງບຸນຈື່ໄດ້ວ່າມີຖົງສະກິດອັນໜຶ່ງ, ສ່ວນອັນອື່ນແມ່ນບໍ່ມີຫຍັງເສຍຫາຍ. ພື້ນຖານການປະຕິວັດໄດ້ແຜ່ກວ້າງອອກໄປເລື້ອຍໆ, ລຸງຊຽງບຸນຈຶ່ງໄດ້ຂຶ້ນມາທາງບ້ານກອກພື້ ຊຶ່ງຕອນນັ້ນໄດ້ຕັ້ງສະກັດປິດໃຫຍ່ແລ້ວ ແລະໄດ້ຕີປິດສິບຈັນຢູ່ອ້າງຄຳແຕກແລ້ວ. ຈາກນັ້ນສັດຕູຢູ່ປິດຈອງຕາມີກອງຮ້ອຍໜຶ່ງທີ່ເຄື່ອນລົງໄປອ້າງຄຳພຸ້ນ ເມື່ອເປັນແນວນັ້ນຫົວໜ້າສັ່ງໃຫ້ພວກລຸງຊຽງບຸນສອງໝູ່ມາລັດສັດຕູ ເນື່ອງຈາກວ່າພວກເພິ່ນເປັນພະນັກງານເຄີຍສ້າງພື້ນຖານຢູ່ບ້ານນັ້ນມາກ່ອນ ຊຶ່ງເວ ລານັ້ນຄືນກອງຮ້ອຍໜຶ່ງມີພຽງປືນຈັກ ແລະ ປືນດຳລົງ 60 ມມ ເທົ່ານັ້ນ. ໃນເວລາທີ່ພວກລຸງຊຽງບຸນເຄື່ອນທີ່ລົງບ້ານນັ້ນ, ພວກເພິ່ນບໍ່ເຫັນປະຊາຊົນອອກມາເຝົ້າເຂົ້າເພື່ອໄລ່ນົກກະປິດມາກິນເຂົ້າໄຮ່ ເພາະວ່າທຸກໆມື້ເທື່ອທີ່ລຸງຊຽງບຸນໄປ ແມ່ນເພິ່ນຈະເຫັນພວກປະຊາຊົນອອກມາໄຮ່ບໍ່ຂາດ, ແຕ່ວ່າເທື່ອນີ້ພັດບໍ່ເຫັນ. ເພິ່ນຈຶ່ງນຶກອອກແລ້ວເວົ້າກັບສະຫາຍສູນທອນວ່າ: ລະວັງໃດມີສັດຕູປະຊາຊົນບໍ່ອອກມາໄຮ່ແບບນີ້ໜາ. ຄວາມຈິງກໍ່ເປັນແນວນັ້ນແທ້, ສັດຕູໄດ້ປິດລ້ອມໄວ້ໝົດ ບໍ່ໃຫ້ປະຊາຊົນອອກມາ. ເມື່ອພວກລຸງຊຽງບຸນໄປຮອດແຄມບ້ານແດງ, ໄດ້ແບ່ງເປັນສອງໝູ່, ໝູ່ທີໜຶ່ງໄປທາງນັ້ນກັບພະນັກງານແດ່, ສ່ວນໝູ່ທີສອງແມ່ນມາທາງຮ່ອມບ້ານໃຕ້ນີ້ ຊຶ່ງມີລຸງຊຽງບຸນ, ໝໍບຸນກອງແລະນາຍໝໍໄດ້ພາກັນແລ່ນເອົາເລີຍ ຈົນມາຮອດບ້ານໃຕ້ ພໍດີພົບສັດຕູທີ່ຍາມຢູ່ແຄມຫ້ວຍກາງບ້ານ ຊຶ່ງບ້ານນີ້ເປັນບ້ານນ້ອຍມີພຽງແຕ່ 4-5 ຫຼັງຄາເຮືອນເທົ່ານັ້ນ. ເມື່ອເວລານັ້ນມີຜູ້ໜຶ່ງ ໄດ້ຮ້ອງຂຶ້ນວ່າ ສັດຕູ! ຖອຍຫຼັງ ຖອຍຫຼັງ! ສັດຕູ! ໝໍສັດຕູຍາວກໍ່ແຂກຂຶ້ນແກ່ວ! ຮືໆໆໆ! ໄປທາງບ້ານສະລົ້ພຸ້ນ. ສຸດທ້າຍໃຜກໍ່ບໍ່ໄດ້ຍິງໃຜ, ມັນກໍ່ແລ່ນໄປຫາໝູ່ມັນຢູ່ເທິງ. ສ່ວນພວກລຸງຊຽງບຸນໄດ້ອອກຫວິດບ້ານແລ້ວ, ມັນຈຶ່ງຍິງນຳຫຼັງ, ຈາກນັ້ນພວກລຸງຊຽງບຸນກໍ່ແລ່ນຂຶ້ນພູ, ປືນກົນຈັກ

ຂອງສັດຕູຍິງກວາດໃສ່,ໃບໄມ້ລົ່ນຍ່າວໆລົງ. ລຸງຊຽງບຸນເວົ້າວ່າ: ບໍ່ໄດ້! ບໍ່ໄດ້! ຢູ່ອາດຈະບໍ່ປອດໄພ, ຈຶ່ງພາກັນບິນຂຶ້ນຮອດຈອມພູ, ຮອດໄຮ່ເຂົ້າແລ້ວພວກເພິ່ນກໍ່ພາກັນຄອຍເບິ່ງການເຄື່ອນໄຫວຂອງສັດຕູ, ຂອງແນວວ່າຮູ້ຈັກສັດຕູຢູ່ນີ້ແລ້ວ, ພວກລຸງຊຽງບຸນກໍ່ໄປຝັງມິນສະກັດລັດຢູ່ສຸດສະລຸງກໍ່ໄດ້ເລື່ອງໂລດ; ອັນນີ້ລະເຮັດໃຈຮ້ອນໂພດ. ມີຜູ້ໜຶ່ງເວົ້າວ່າ: ເອີ! ນີ້ມັນກໍ່ເສຍຂ້ອນຢູ່ແລ້ວ, ເບິ່ງມັນກໍ່ບໍ່ໄດ້ກິນຮອດເຂົ້າ, ຂ້າໝູໄວ້ແລ້ວກໍ່ປະຖິ້ມໄປຊື່ໆ. ສ່ວນປະຊາຊົນໃນບ້ານບາງຄົນກໍ່ໂຕນລົງໜອງຄວາຍເພາະຢ້ານເດ, ສຽງປືນກົນຈັກ 4-5 ກະບອກມັນທັງຍິງທັງແລ່ນປົບຕາຍເອງ, ແຕ່ຝ່າຍລຸງຊຽງບຸນບໍ່ໄດ້ຍິງ. ສ່ວນໝູ່ໄປລຸງຊຽງບຸນທີ່ຢູ່ທາງນັ້ນ ເຂົາໄດ້ອອກມາສຳຫຼວດເບິ່ງສະຖານທີ່ ແລະ ກໍ່ໄດ້ຫຸບເອົາຊີ້ນໝູ, ຫຸບເອົາເຄື່ອງຂອງປະຊາຊົນສິ່ງຄືນໝົດແລ້ວ ກໍ່ພາກັນມາອ່າງຄຳພີ້. ພວກເພິ່ນມີພຽງແຕ່ 15 ຄົນ ນຳຕິດຕາມສັດຕູເປັນ 100 ຄົນ. ລຸງຊຽງບຸນຄຶດວ່າ: "ເຮັດແນວນີ້ຕາຍ! ຮີບແພ້ (ເຊົາຕິດຕາມ), ເພາະວ່າທາງໜ້ານີ້ ແມ່ນຜ່ານບ້ານສຸດສະລຸງ, ຄັນມັນຍາມຢູ່ແຄມບ້ານແມ່ນພວກເຮົາຕາຍໝົດລະ". ຫຼັງຈາກນັ້ນພວກເພິ່ນກໍ່ພາກັນກັບໃນຕອນກາງຄືນເລີຍມາກິນເຂົ້າຢູ່ບ້ານອ່າງຄຳພີ້.

ໄລຍະນັ້ນລຸງຊຽງບຸນກໍ່ໄປໂຄສະນາສ້າງພື້ນຖານຕະຫຼອດ ແລະ ເພິ່ນເມື່ອຍຫຼາຍແລ້ວ, ແຕ່ເພິ່ນພັດໄປຮຽນທິດສະດີຢູ່ບ້ານຕຸ້ມແຂວງເມືອງຕະໂອ້ຍ. ໃນເວລາທະຫານເຮົາຕີປິດ ເຂົາສັ່ງໃຫ້ປິດໂຮງຮຽນແມ່ນພວກລຸງຊຽງບຸນຕ້ອງໄດ້ປິດໂລດ. ເມື່ອພວກເພິ່ນຮຽນທິດສະດີໝົດແລ້ວ, ຂັ້ນເທິງກໍ່ຍັງບໍ່ທັນໄດ້ຊັບຊ້ອນເມືອບ້ານໃຜບ້ານມັນ ຫຼື ຫ້ອງການໃຜມັນເທື່ອ. ຈາກນັ້ນພວກເພິ່ນມາຈຶ່ງໄດ້ເດີນທາງໄປເມືອງພິນຊຶ່ງໃຊ້ເວລາ 2 ມື້, ພໍດີພວກເພິ່ນເດີນມາຮອດເຄິ່ງທາງ ພວກເພິ່ນໄດ້ພົບປະຊາຊົນແລະເຂົາເວົ້າວ່າ: "ສຽງປືນໜັກທີ່ສຸດຢູ່ເມືອງພິນ ຈັກເຂົາເຮັດຫຍັງ? ພວກເພິ່ນຍ່າງໃກ້ມາໃກ້ມາ, ປະຊາຊົນເວົ້າຢໍ້າອີກວ່າ: ທະຫານອິດສະຫຼະທັງໝົດເຂົ້າຕີເມືອງພິນແລ້ວ! ສ່ວນຍັງປິດທ່າໂຊ່ງເຂົາກຳລັງປິດລ້ອມຢູ່. ເມື່ອພວກຊຽງບຸນມາຮອດບ້ານສະແລ, ພວກ

ຊຽງບຸນໄດ້ພໍ້ອ້ານສິນສັກ ໄຊສິງຄານ ເພິ່ນເວົ້າວ່າ: ເອີດີແລ້ວພວກສະຫາຍ ມາ, ພວກຊຽງບຸນຖືກໄປເຊໂປນ! ໃນຕົວຈິງແລ້ວພວກລຸງຊຽງບຸນບໍ່ໄດ້ຕິດອກ ສ່ວນຫຼາຍພວກເພິ່ນເປັນຜູ້ໜູນຫຼັງ ແລະ ມີແຕ່ທະຫານຫວຽດເປັນຜູ້ຕີ. ຈາກ ທັ້ນພວກລຸງຊຽງບຸນກໍ່ລໍຖ້າຢູ່ສະແລ (ເມືອງພິນ) ພໍດີເຂົາເອົາລົດອີ່ຮ້າງມາ ຕ້ອນກັບໄປເຊໂປນ. ຢູ່ທັ້ນພວກລຸງຊຽງບຸນໄດ້ພົບກັບສິນສັກ ສຸກຂະວົງ, ວັນ ເທົາ, ຈັນອ່ອນ ແລະສະຫາຍລວງ (ດຽວນີ້ເຂົາເສຍຊີວິດໝົດແລ້ວ, ຍັງ ເຫຼືອແຕ່ລຸງຊຽງບຸນ). ພໍມາຮອດເຊໂປນ ເຂົາຕີຮຽບຮ້ອຍແລ້ວ (ປົດປ່ອຍ ແລ້ວ), ຍັງເຫຼືອໄວ້ແຕ່ກົ່ນເໝັນເນົ່າຄົນຕາຍ, ພ້ອມກັບຄ້ອນໄຟ ປົດປ່ອຍທ່າ ໂຂ່ງແມ່ນປີ 1961. ເວົ້າລວມແລ້ວພວກລຸງຊຽງບຸນມາປົກຄອງທໍາອິດ ແມ່ນ ເຂົ້າມາບ້ານເຊໂປນພຸ້ນ, ເພາະຫ້ອງການພວກເພິ່ນຢູ່ບ້ານເຊໂປນພຸ້ນເດ໋. ເວ ລາທີ່ພວກເພິ່ນຮອດທໍາອິດບໍ່ມີໃຜຈັກຄົນ, ເພາະປະຊາຊົນປົບໜີໝົດແລ້ວ, ມີ ແຕ່ບ້ານຮ້າງ,ແລ້ວຂັ້ນເທິງໃຫ້ທະຫານປ້ອງກັນຕິດຕາມໄປນໍາພວກລຸງຊຽງບຸນ ໝວດໜຶ່ງ ແມ່ນໝວດຂອງສະຫາຍທົນ. ເວລານັ້ນພວກລຸງຊຽງບຸນເປັນພະ ນັກງານຂົນ ຂວາຍເພື່ອເຂົ້າມາປຶກສາຫາລື ແລະໄປຊອກຫາປະຊາຊົນຢູ່ຕາມ ເຮືອນຊານ ບ້ານຮ້າງຕ່າງໆຈຶ່ງໄດ້ພົບເຂົາເຈົ້າເຂົ້າມາຕໍາເຂົ້າ. ພວກລຸງຊຽງ ບຸນໄດ້ເວົ້ານໍາພໍ່ແມ່ປະຊາຊົນວ່າ: “ດຽວນີ້ອິດສະຫຼະໄດ້ປົດປ່ອຍເຊໂປນແລ້ວ, ພວກເຈົ້າຈິ່ງພາກັນເຂົ້າມາບ້ານເຂົ້າມາເມືອງສາ, ພວກເຮົາບໍ່ຂ້າບໍ່ຕີພວກເຈົ້າ ດອກ, ພວກເຮົາລ້ວນແຕ່ແມ່ນພີ່ນ້ອງກັນເດ”. ຫຼັງຈາກນັ້ນພວກເຂົາເຈົ້າຈຶ່ງໄດ້ ພາກັນກັບຄືນມາບ້ານເກີດເມືອງນອນຂອງຕົນເປັນທີ່ຮຽບຮ້ອຍ. ແລ້ວພວກ ລຸງຊຽງບຸນ ກໍ່ເລີ່ມເຄື່ອນໄຫວຢູ່ທີ່ນີ້, ພວກເພິ່ນໄດ້ແບ່ງກັນໄປເຊັ່ນ: ສະຫາຍ ສິນສັກໄປທາງບ້ານເຊໂປນ, ສະຫາຍຈັນອ່ອນໄປທາງບ້ານທ່າໂຂ່ງ (ບ້ານ ໃໝ່), ສ່ວນລຸງຊຽງບຸນເອງແມ່ນຢູ່ບ້ານສິບມື້ພີ້. ຕໍ່ມາພວກເພິ່ນກໍ່ມາຫາຕາ ແສງເພື່ອປຶກສາ ຫາລືວຽກງານການປົກຄອງຕ່າງໆກັບຕາແສງຄື: ພວກເພິ່ນ ໄດ້ພາກັນຈັດຕັ້ງ ນາຍຄູໃຫ້ແກ່ບ້ານຕ່າງໆຢູ່ເມືອງເຊໂປນ, ເພາະວ່າໃນເວລາ ນັ້ນ ນາຍຄູກໍ່ມີພຽງແຕ່ນາຍຄູແກ້ ແລະນາຍຄຸສຸມິດເທົ່ານັ້ນ. ດັ່ງນັ້ນສິ່ງ

ຈຳເປັນທຳອິດແມ່ນພວກເພິ່ນຈັດຕັ້ງນາຍຄູ, ບໍ່ດັ່ງນັ້ນເຮົາຊິບໍ່ມີນາຍຄູສອນໜັງສື. ພວກລຸງຊຽງບຸນໄດ້ປະກາດ ແລະລະດົມເອົານັກຮຽນຫ້ອງທີສອງໃຫ້ມາສະໝັກເປັນຄູ. ຈາກນັ້ນກໍ່ມີນັກຮຽນຫຼາຍຄົນເຂົ້າມາສະໝັກ ຊຶ່ງຜູ້ສະໝັກນັ້ນແມ່ນທອງເດີນ ໄຊຍະເສດ ແລະອິນໂປງເຂົາເປັນຮຸ່ນທີໜຶ່ງມາຮຽນນາຍຄູ, ແລ້ວພວກເພິ່ນໄດ້ຈັດຕັ້ງນາງຍູ້ເປັນຫົວໜ້າຝຶກຫັດຄູ. ຫຼັງຈາກນັ້ນພວກເພິ່ນກໍ່ໄດ້ສົ່ງເຂົາເຈົ້າໄປແຕ່ລະບ້ານ ແຕ່ລະຕາແສງ. ສ່ວນລຸງຊຽງບຸນເອງແມ່ນເປັນພະນັກງານປົກຄອງຢູ່ເມືອງ. ເມື່ອປະຊາຊົນໄດ້ເຫັນການເຄື່ອນໄຫວຂອງພວກເພິ່ນມີທ່າກ້າວ,ເຂົາກໍ່ທະຍອຍເຂົ້າມາບ້ານໝົດ; ທາງຂັ້ນເທິງກໍ່ໄດ້ຈັດຕັ້ງຄະນະຮັບຜິດ ຊອບວຽກງານແຕ່ລະດ້ານຢູ່ເມືອງ ແລະ ໄດ້ແຕ່ງຕັ້ງສະຫາຍຈັນເທົາເປັນເລຂາພັກ, ສ່ວນສະຫາຍສິນສັກເປັນຮອງເລຂາພັກຮັບຜິດຊອບຢູ່ເມືອງ [112] , ລຸງຊຽງບຸນເປັນກຳມະການ, ສະຫາຍຈັນອ່ອນແລະສະຫາຍຈັນລົມເປັນກຳມະການ. ຫຼັງຈາກນັ້ນທາງຂັ້ນເທິງເພິ່ນໄດ້ຖອນສະຫາຍສິນສັກກັບເມືອ, ແລ້ວເອົາຊຽງສາມາເປັນເຈົ້າເມືອງ, ຊຽງບຸນເປັນຮອງເຈົ້າເມືອງ, ລຸງຊຽງບຸນສະ ຫາຍທອງສາເປັນກອງບັນຊາທະຫານແລະເສດຖະກິດ, ສ່ວນສະຫາຍຈັນອ່ອນແມ່ນຮັບຜິດຊອບວຽກງານການຄ້າ. ມາຮອດປີ 1963 ຂັ້ນເທິງໄດ້ຊັບ ຊ້ອນຄືນໃໝ່, ແລ້ວເອົາສະຫາຍຊຽງສາກັບໄປແຂວງສະຫວັນນະເຂດ, ແລ້ວເພິ່ນແຕ່ງຕັ້ງໃຫ້ເປັນເຈົ້າເມືອງ. ສ່ວນວຽກງານການທະຫານເວລານັ້ນ ແມ່ນບໍ່ມີໃຜຮັບຜິດຊອບ (ໃນພັກ), ຂັ້ນເທິງຈຶ່ງໄດ້ຖອນລຸງຊຽງບຸນໄປຮັບຜິດຊອບ ການທະຫານ, ເພິ່ນເປັນກອງບັນຊາການທະຫານເມືອງເຊໂປນ, ໃນນີ້ຍັງມີສະ ຫາຍເຫຼັກ, ສະຫາຍສີຈັນແລະສະຫາຍຄຳໄຫວ. ສຳລັບສະຫາຍສີຈັນແມ່ນຮັບຜິດຊອບທະຫານເມືອງ, ເພາະລາວເປັນຄົນອ່າງຄຳ, ເຖິງປະຈຸບັນນີ້ລາວກໍ່ຍັງມີຊີວິດຢູ່. ໃນປີ 1963-1964 ລຸງຊຽງບຸນ ພັດຖືກໄປຮຽນຢູ່ປັກກິ່ງ ເມືອງຈີນ. ທາງສູນກາງ

---

112 ທ່ານ ສິນສັກ ແມ່ນ ນາຍພັນ ສິນສັກ ໄຊສິງຄາມທັ້ນ, ລາວເປັນຄົນເຜົ່າລະແວຢູ່ອັດຕະປື ມາເຄື່ອນໄຫວການປະຕິວັດຢູ່ເມືອງເຊໂປນ ແຂວງສະຫວັນນະເຂດ.

ຕ້ອງການພະນັກງານຈາກແຂວງສະຫວັນນະເຂດໄປຮຽນຈຳນວນ 5 ຄົນ, ຂັ້ນເທິງເພິ່ນໄດ້ຖອນເອົາພະນັກງານຂັ້ນເມືອງ ແລະຢູ່ໃນແຂວງຊຶ່ງໃນນັ້ນລວມມີລຸງຊຽງບຸນ ແລະ ສະຫາຍບຸນຫຼາວຽງມະນີ ສຸດທ້າຍກໍ່ໄດ້ພຽງ 2 ຄົນເທົ່ານັ້ນ. ຂັ້ນເທິງຍັງບອກພວກລຸງຊຽງບຸນວ່າ: ຍັງຊິສົ່ງ 3 ຄົນໄປຕາມຫຼັງ ອີກຕື່ມ, ແຕ່ສຸດທ້າຍກໍ່ບໍ່ເຫັນສົ່ງໄປເລີຍ. ດັ່ງນັ້ນ, ສອງອ້າຍນ້ອງພວກລຸງຊຽງບຸນ ກໍ່ອອກເດີນທາງຈາກເຊໂປນ, ຍ່າງໄປຈົນຮອດຜານົບລັງຄັງແຂວງຄຳມ່ວນ. ໃນລະຫວ່າງການເດີນທາງພວກເພິ່ນເກືອບຕາຍຢູ່ນ້ຳງົ້, ເພາະເຂົາລືກັນວ່າ: ຢູ່ນ້ຳງົ້ມີເງືອກເຄີຍເອົາຄົນຊ້ຳບໍ! ພໍໃນເວລານັ້ນຍິນກຳລັງຍິງຢູ່ທາງນ້ຳງົ້ ແລະ ມັນກໍ່ມາຍິງຢູ່ຍ່າງເນື່ອງນິດລຽນຕິດ. ເມື່ອພວກລຸງຊຽງບຸນໄປເຖິງນ້ຳງົ້ກໍ່ຄ່ຳແລ້ວ, ພໍດີພວກເພິ່ນໄປພົບຫວຽດນາມ 3 ຄົນ, ບັງເອີນລຸງຊຽງບຸນເຈັບທ້ອງຂຶ້ນມາເວລາພວກເພິ່ນໄປລໍຖ້າເຮືອນປະຊາຊົນເພື່ອຈະຂ້າມນ້ຳ, ໄດ້ເຮືອລຳໜຶ່ງແລ້ວຄຳເຫຼັກກັບລຸງຊຽງບຸນພາຍເຮືອຂ້າມນ້ຳງົ້, ເມື່ອພາຍຮອດເຄິ່ງແມ່ນ້ຳເຮືອກໍ່ຈົມ, ຍ້ອນລາວພາຍໄປໜ້າ ບາດລຸງຊຽງບຸນພັດພາຍຄືນຫຼັງ, ເຮືອໄປບໍ່ໄດ້ສຸດທ້າຍກໍ່ປະເຮືອ, ແລ້ວພວກເພິ່ນແຂວນເຮືອນຈ່ຳງ່າໄມ້, ພວກເພິ່ນຈຳເປັນຕ້ອງໄດ້ເອົາຕົວລອດດ້ວຍລອຍຂ້າມນ້ຳເອົາເອງ. ເມື່ອໄປຮອດຜານົບລັງຄັງຈຶ່ງເຖິງສຳນັກຂອງຝ່າຍເຮົາ, ຢູ່ທັ້ນຊຽງບຸນໄດ້ພົບສະຫາຍສູນທອນໝູ່ດຽວກັນ, ລາວຮັບຜິດຊອບເຮັດໜັງສືຜ່ານແດນ, ສະຫາຍສູນທອນເຮັດໜັງສືຜ່ານແດນໃຫ້ພວກເພິ່ນຮຽບຮ້ອຍແລ້ວ, ພວກເພິ່ນສອງຄົນກໍ່ໄດ້ອອກເດີນທາງຕໍ່ໄປໂດຍໄປນຳລົດຫວຽດນາມ. ເມື່ອສອງຄົນພວກເພິ່ນເຂົ້າໄປໃນລົດ, ພວກເຂົາກໍ່ປິດໝິດຈົນມືດທັງສີ່ດ້ານເພາະເພິ່ນຢ້ານເສຍລັບ, ທັງສອງຄົນເພິ່ນກໍ່ບໍ່ເຫັນຫຍັງເລີຍ. ພວກເພິ່ນຈົນຊິຕາຍເພາະເມົາລົດ; ສະຫາຍບຸນຫຼ້າເມົາລົດຮາກຈົນນ້ຳບີຊິອອກ ຈຶ່ງໄດ້ພັກຜ່ອນຢູ່ແທງຮວ່າ[113]. ຫຼັງຈາກນັ້ນພວກເພິ່ນກໍ່ເມືອຊຳເໜືອ, ໄປພັກຢູ່ໂຮງຮຽນທະຫານທີ່ຕີນພູແຄ. ໃນເວລານັ້ນ, ໃຜຊິຮູ້ຈັກວ່າສະຖານທີ່

---

113 ແທງຮົວແມ່ນຊື່ແຂວງຖານຫົວ ຢູ່ປະເທດຫວຽດນາມ ທີ່ມີຊາຍແດນຕິດກັບແຂວງຊຳເໜືອປະຈຸບັນ.

ນັ້ນແມ່ນຊຳເໜືອ. ພວກເພິ່ນພັກຢູ່ນັ້ນລໍຖ້າການແຕ່ງຕັ້ງຄືນມາຈາກແຕ່ລະແຂວງ. ພວກເພິ່ນລໍຖ້າຢູ່ນັ້ນໄດ້ 8 ເດືອນຈົນເບື່ອ, ສະຫາຍບຸນຫຼ້າຈຶ່ງຊວນລຸງຊຽງບຸນໂຕນກັບເມືອ. ຈາກນັ້ນຂັ້ນເທິງ ໄດ້ໃຫ້ພວກລຸງຊຽງບຸນໄປຢູ່ຮັບຕ້ອນຊຽງລວງ. ສະຫາຍມັງໄດ້ເບີກຈ່າຍເງິນ, ເຄື່ອງ, ຜ້າຫົ່ມ, ສິ້ງເສື້ອສອງຄູ່ໃຫ້ສອງຄົນພວກເພິ່ນ. ຜ້າຫົ່ມກໍ່ບາງໆພວກເພິ່ນຫົ່ມແລ້ວກໍ່ຍັງໜາວຢູ່ ແລະບໍ່ມີໃຜຮູ້ດອກວ່າ: ຢູ່ຊຳເໜືອມັນໜາວສໍ່າໃດ. ເວລາທີ່ພວກເພິ່ນຢູ່ຮັບຕ້ອນຊຽງລວງນັ້ນ ພວກເພິ່ນຈະອອກໄປຫຼິ້ນຢູ່ບ້ານຊຽງລວງ ກໍ່ບໍ່ໄດ້, ເພາະມີນັກສືບຂອງສັດຕູ ພວກມັນໄດ້ຂ້າພະນັກງານພວກລຸງຊຽງບຸນ ສອງຄົນແລ້ວ ແລະພວກເພິ່ນກໍ່ຢູ່ຊຽງລວງດົນປະມານ 7-8 ເດືອນ. ຫຼັງຈາກນັ້ນຂັ້ນເທິງໃຫ້ຍ້າຍພວກລຸງຊຽງບຸນໄປຢູ່ພູແຄ, ບໍ່ແມ່ນສະເພາະແຕ່ສອງຄົນເພິ່ນ, ແຕ່ຍັງມີໝູ່ຂອງພວກເພິ່ນ ມານຳກັນເຖິງ 40 ປາຍຄົນ. ຈາກນັ້ນລຸງຊຽງບຸນ ກໍ່ຖືກໄປຮຽນຢູ່ໂຮງຮຽນກົມມະດຳພູບອງ ມີນັກຮຽນເຖິງ 40 ປາຍຄົນ ມາຈາກທຸກພາກຂອງປະເທດ. ຫຼັງຈາກນັ້ນລຸງຊຽງບຸນກໍ່ຖືກຄັດເລືອກໃຫ້ໄປຮຽນຢູ່ຕ່າງປະເທດ ຂັ້ນເທິງປະກອບປືນກາລານົບສຳລັບຍິງຍົນ ຂັ້ນເທິງບອກພວກລຸງຊຽງບຸນວ່າ: ຍົນຊິຍິງໂຮງຮຽນນີ້. ພວກລຸງຊຽງບຸນຖາມຂັ້ນເທິງຄືນວ່າ: ຍົນຊິຍິງບໍ່ໄດ້ຍ້າຍໜີຈາກນີ້ບໍ່? ຂັ້ນເທິງຕອບວ່າ: ບໍ່ໄດ້ຍ້າຍ ຕາຍກໍ່ຕາຍຢູ່ນີ້ລະ. ເວລານັ້ນລຸງຊຽງບຸນຄິດຢ້ານ, ແລ້ວເພິ່ນກໍ່ຈົ່ມຢູ່ໃນໃຈວ່າ: ຕາຍແລ້ວບາດນີ້. ພໍດີໃນເວລານັ້ນພວກໝູ່ເພື່ອນຂອງເພິ່ນໄດ້ລຳລຽງ ປືນໃຫຍ່ເຂົ້າມາແລ້ວ, ພວກເພິ່ນກໍ່ເອົາຄົນປະມານ 40 ປາຍຄົນ ໄປຮຽນວິທີມ້າງ ແລະ ວິທີຍິງປືນໃຫຍ່. ຈາກນັ້ນ ພວກເພິ່ນກໍ່ພາກັນມ້າງປືນໃຫຍ່ອອກ ເປັນຊິ້ນສ່ວນແລ້ວເປ້ຂຶ້ນສັນພູບອງ, ສ່ວນເລົາປືນ ແມ່ນພວກລຸງຊຽງບຸນໄດ້ຫາວິທີທີ່ຈະເອົາຂຶ້ນສັນພູບອງດ້ວຍວິທີຍາຍຄົນສຸດເລົາປືນ ແຕ່ກໍ່ຍັງເອົາໄປບໍ່ໄດ້, ສຸດທ້າຍພວກເພິ່ນຈຶ່ງເອົາໄປຕັ້ງຢູ່ບ້ານກາງບຸງ. ເວລານັ້ນລຸງຊຽງບຸນບໍ່ຮູ້ວ່າວັນທີເທົ່າໃດ, ແຕ່ເພິ່ນຈື່ໄດ້ວ່າເປັນເວລາ 8 ໂມງເຊົ້າ. ເພິ່ນໄດ້ບອກກັບໝູ່ສະຫາຍວ່າ: ຍົນຈະມາຍິງເນີ, ພວກສະຫາຍຈະຢູ່ປະຈຳກອງປືນໃຫຍ່ເພື່ອຊິຍິງຍົນບໍ່? ຫຼືຈະໄປຢູ່ທາງໂຮງ

ຮຽນກໍ່ໄດ້, ຢູ່ພຸ້ນມີປືນກາລານິບບອກໜຶ່ງແລ້ວ, ພວກສະຫາຍຈະຍິງບໍ່? ສຳລັບລຸງຊຽງບຸນເປັນຜູ້ຮັບຜິດຊອບຮອງໝວດເພື່ອສັ່ງໃຫ້ຍິງໆ! ພວກເພິ່ນທຸກຄົນຕ້ອງກຽມຂຸມເພື່ອລໍຖ້າຍິງຍົນຂອງອາເມລິກາ. ພໍດີຮອດ 9 ໂມງ ຍົນຂອງອາເມລິກາກໍ່ມາ, ສຽງປືນດັງສະນັ່ນໝົດທົບ. ຕອນເພິ່ນບອກໃຫ້ຂຸດຂຸມໃຜກໍ່ບໍ່ຂຸດ, ບາດຍົນຍິງມາຈັກໃຜຕໍ່ໃຜໂຕນລົງຂຸມທີ່ລຸງຊຽງບຸນຂຸດໄວ້ນັ້ນເຕັມໄປໝົດເລີຍ ເພິ່ນແລ່ນໄປຫາຂຸມເວັ້ນຂຸມພຸ້ນ, ໄປເບິ່ງໂຮງຮຽນ ມັນຮູ້ວ່າກຳລັງໄຟແຮງນ້ອຍ, ມັນຈຶ່ງເລັ່ງໃສ່ໂຮງຮຽນ, ໂຮງຮຽນເພິ່ນກໍ່ປະປີ້ນຢູ່ຫັ້ນເລີຍ ພວກເພິ່ນ ເຕັ້ນໄປເຕັ້ນມາຍິງປືນຮື່ມຮ່ຳ ຮີມຮ່ຳ ຕວດ! ຍົນຄັນໜຶ່ງຖືກແລ້ວເດ໋! ໄປແລ້ວ, ໄປທາງດນາມ ແລະ ຄັນທີ 2 ຕວດ ຖືກອີກແລ້ວ, ລຸງຊຽງບຸນວ່າແລ້ວ ຖືກແລ້ວໃດເພິ່ນຢູ່ຂຸມເພິ່ນຄອຍຢູ່. ເບິ່ງສຽງສະນັ່ນທັງຟ້າທັງດິນ. ລຸງຊຽງບຸນພໍ້ພະນັກງານຜູ້ໜຶ່ງແມ່ນຄົນຄຳມ່ວນ, ເສື້ອກໍ່ແກ້ເຫື່ອໄຫຼຊິດໆ, ລຸງຊຽງບຸນຖາມລາວວ່າ: ເປັນຫຍັງເຮີຍ! ຖືກເຈັບບໍ? ລາວຕອບວ່າ: ບໍ່ນ່າ! ລຸງຊຽງບຸນຖາມຢ້ຳອີກວ່າ: ເປັນຫຍັງຈຶ່ງສັ່ນ? ລາວຕອບວ່າ: ຢ້ານ! ລຸງຊຽງບຸນ ຮ້ອງຂຶ້ນວ່າ: ໂອຍ! ຕາຍເສຍທ້ອນໂຕເປັນທະຫານພັດຢ້ານຕາຍເດນໍ໋!. ໃນມື້ນັ້ນຍົນມີ 9 ລຳ, ແຕ່ພວກເພິ່ນໄດ້ຍິງຕົກ 2 ລຳ ໃນມື້ດຽວກັນ. ຜູ້ທີ່ຍິງຍົນຕົກແມ່ນພວກກອງປືນໃຫຍ່ ແລະ ແມ່ນທະຫານຫວຽດເປັນຜູ້ຍິງຕົກ, ສ່ວນພວກເພິ່ນແມ່ນມີປືນນ້ອຍມີແຕ່ຍິງຊ່ວຍຊື່ໆ ແລະ ກໍ່ຍິງຢູ່ຕີນພູບອງພີ້.

ຫຼັງຈາກພວກເພິ່ນຮຽນແລ້ວ,ຂັ້ນເທິງຄັດເລືອກໄດ້ແຕ່ 15 ຄົນ ໃນຈຳນວນ 50 ຄົນນັ້ນ ຊຶ່ງຂັ້ນເທິງຕ້ອງການແມ່ນ 19 ຄົນ. ຫຼັງຈາກນັ້ນຂັ້ນເທິງໃຫ້ລົດໄປຮັບພວກລຸງຊຽງບຸນ ແລະ ເຄື່ອງຂອງ, ແລ້ວຍ້າຍອອກຈາກບ່ອນນັ້ນ. ສ່ວນພວກສະຫາຍທີ່ລໍຖ້າໄປຮຽນແມ່ນເພິ່ນໃຫ້ໄປຢູ່ບ້ານນາເມືອງ, ຍັງເຫຼືອອີກ 24 ຄົນ ແມ່ນຂັ້ນເທິງເອົາໄປຢູ່ສູນກາງ ຊຶ່ງຕອນນັ້ນຫົວໜ້າແມ່ນສະຫາຍຄຳເລັ່ງ. ຢູ່ສູນກາງນັ້ນຍົນກໍ່ຍັງມາບຸກ 30 ລຳ, ໃນເວລານັ້ນລຸງຊຽງບຸນກໍ່ຍັງຢູ່ບ້ານນາເມືອງຫັ້ນເພື່ອລໍຖ້າຍົກຍ້າຍ ແລະ ເສຍເວລາໄປເກືອບເປັນເດືອນ.. ຫຼັງຈາກນັ້ນຂັ້ນເທິງສັ່ງໃຫ້ລຸງຊຽງບຸນໄປຢູ່ບ້ານນາໄກ່, ຢູ່ຕໍ່ໜ້າຫ້ອງ

ການເມືອງ, ແລ້ວຂັ້ນເທິງກໍ່ລຸລ່ວງວ່າຈະມີຄົນສູນກາງ 5 ຄົນຢູ່ຫ້ອງການເມືອງ, ຫຼືມາແຕ່ທາງໃດກໍ່ບໍ່ຮູ້? ເພິ່ນຈະມາເອົາລົດສອງຄັນ, ແອມຄັນໜຶ່ງເອົາໄປແປງຢູ່ຮ່າໂນ້ຍ, ອີກຄັນໜຶ່ງແມ່ນເພິ່ນໃຫ້ພວກລຸງຊຽງບຸນຂີ່. ເວລາພວກລຸງຊຽງບຸນເດີນທາງຄືນທຳອິດລົດພັດຕົກຂຸມໂບມ, ພວກເພິ່ນພາກັນແກ່ລົດຂຶ້ນຈາກຂຸມໂບມກໍ່ບໍ່ໄດ້, ຄືນນັ້ນພວກເພິ່ນເລີຍບໍ່ໄດ້ໄປ[114]. ຈາກນັ້ນຄືນທີສອງພວກລຸງຊຽງບຸນຈຶ່ງໄດ້ເດີນທາງຕໍ່ໄປຮອດຫວຽດນາມ, ແລ້ວພວກເພິ່ນພັກຢູ່ຊິມ 2 ວັນ[115]; ຈາກນັ້ນພວກເພິ່ນໄປຮ່າໂນ້ຍ, ພັກຢູ່ 214 ສອງຊົ່ວໂມງ, ຈາກນັ້ນກໍ່ຍ້າຍໄປຢູ່ສຳນັກ 98, ແລ້ວພວກເພິ່ນກໍ່ຮຽນຢູ່ 98 ເປັນເວລາ10 ວັນ[116]. ການຮຽນແມ່ນຮຽນການເມືອງ, ແບບວິທີໄປ ແລະ ການກິນຢູ່ ຊຶ່ງເລຂາພັກເວລານັ້ນແມ່ນສະຫາຍແພວ ຄົນທີ່ເປັນເຈົ້າແຂວງຈຳປາສັກ ຫຼື ສາລະວັນ (ຫຼືອັດຕະປື), ສະຫາຍຄຳລຽງເປັນຮອງ ແລະ ພວກລຸງຊຽງບຸນເປັນກຳມະການ. ຫຼັງຈາກຮຽນໄດ້ 10 ວັນ ຢູ່ 98 ພວກເພິ່ນກໍ່ປະເຄື່ອງຂອງ ແລະຜ້າແພຢູ່ຫັ້ນ, ສ່ວນຊຽງບຸນແມ່ນເອົາແພຕັ່ງອັນໜຶ່ງ (ແພຕັ່ງສັດຕູ). ພໍຮອດ 4 ໂມງແລງ ພວກເພິ່ນຂຶ້ນລົດໄຟຢູ່ຮ່າໂນ້ຍໄປຮອດຊາຍແດນຈີນເວລາ 2 ໂມງກາງຄືນ, ໃຜໆກໍ່ວ່າແຈ້ງແລ້ວເພາະມີໄຟຟ້າຮຸ່ງໄປໝົດ. ພ້ອມກັນນັ້ນພວກເພິ່ນກໍ່ເຫັນທາງໂຮງຮຽນຈີນມາຮັບ, ພວກເພິ່ນປ່ຽນລົດໄຟໃຫຍ່ ຢູ່ສະຖານີນັ້ນ. ແລ້ວຂຶ້ນລົດໄຟຈີນ ເດີນທາງຕໍ່ອີກສອງມື້ສອງຄືນ ຈຶ່ງຮອດປັກກິ່ງ ເວລາ 9 ໂມງ. ພວກເພິ່ນພັກຢູ່ໂຮງຮຽນໄດ້ 7 ມື້, ຫຼັງຈາກນັ້ນກໍ່ເລີ້ມຮຽນ. ຈີນກໍ່ຈ່າຍເຄື່ອງຂອງເປັນເຄື່ອງຈີນທັງໝົດ, ແລ້ວໃສ່ຊື່ກອງຂອງພວກລຸງຊຽງບຸນວ່າ: ກອງ 18 ໃຕ້ຊື່ງຕັ້ງຢູ່ເຂດ 12 ພັນນາ. ຢູ່ຫັ້ນພວກລຸງຊຽງບຸນໄດ້ຮຽນການ

---

114 ສະໄໝສົງຄາມທຳລາຍ ພະນັກງານທະຫານເຮົາໄປມາແຕ່ກາງຄືນ, ສ່ວນກາງເວັນໄດ້ລີ້ຊ່ອນຢູ່ຕາມປ່າຕາມດົງ ເພາະວ່າຍິນຍົນທຳລາຍໜັກ.

115 ຊີມແມ່ນບ່ອນຮັບຕ້ອນທະຫານລາວ ທີ່ໃກ້ກັບເມືອງຮ່າໂນ້ຍ.

116 ຫ້ອງການ 98 ແມ່ນຫ້ອງການຂອງແນວລາວຮັກຊາດຢູ່ຮ່າໂນ້ຍໃນສະໄໝສົງຄາມ.

ທະຫານ, ຮຽນກອງຫຼອນໃຕ້ດິນ ແລະ ຂະແໜງອື່ນໆຂອງລະບົບໂຮງຮຽນວິທະຍາຄານການທະຫານ. ວິຊາທີ່ພວກລຸງຊຽງບຸນໄດ້ຮຽນມາໃນຄາວນັ້ນ ຮອດມື້ນີ້ແມ່ນເພິ່ນປະຖິ້ມໝົດ ແລະລືມໝົດແລ້ວ. ເວລາທີ່ພວກເພິ່ນຮຽນຢູ່ 12 ພັນນານັ້ນມີນາຍພາສາ 5 ຄົນ ສ່ວນອາຈານສອນມີ 2 ຄົນ. ການຮຽນແມ່ນພວກເພິ່ນຮຽນປິດລັບ, ໃຊ້ເວລາໃນການຮຽນແມ່ນ 1 ປີ 6 ເດືອນ. ເນື້ອໃນຕົ້ນຕໍແມ່ນຮຽນການຂະຫຍາຍຕົວຂອງສັງຄົມມະນຸດ, ຮຽນກ່ຽວກັບປະຫວັດສາດສັງຄົມຈີນ ແລະຊີວິດການເປັນຢູ່ຕົວຈິງຂອງພັກຄອມມູນິດຈີນ ຊຶ່ງເວລານັ້ນ ເລຂາພັກແມ່ນ ທ່ານເໝົາເຈີຕົງ ກັບ ທ່ານຈູເອີນລາຍ. ນອກຈາກນັ້ນພວກເພິ່ນຍັງໄດ້ຮຽນປະຫວັດສາດຂອງສັງຄົມລາວ, ຮຽນກ່ຽວກັບຊີວິດການເປັນຢູ່ຂອງພັກລາວ. ຫຼັງຈາກນັ້ນແລ້ວຈຶ່ງເຂົ້າຮຽນວິຊາສະເພາະ. ໃນວິຊາສະເພາະທີ່ຮຽນນີ້ ແມ່ນເລັ່ງໃສ່ການສ້າງຮາກຖານຢູ່ທົ່ງພຽງ ແລະຢູ່ຕົວເມືອງເຮັດແນວໃດ? ສ້າງພື້ນຖານກວ້າງ ແລະເຮັດແນວໃດ ຮຽນວິທີປະສານງານກັບທາງເຂດກຽມລັດຖະປະຫານ, ຮຽນເຮັດເສິກ, ພວກເພິ່ນຮຽນຮອດວິທີເຮັດສະເກັດ ແລະອາວຸດພື້ນເມືອງພຸ້ນ. ຫຼັງຈາກພວກເພິ່ນຮຽນຈົບມາແລ້ວສູນກາງກໍ່ເອົາແຕ່ 5 ຄົນຢູ່ສູນກາງ, ເຫຼືອຈາກນັ້ນແມ່ນກັບກົມກອງໃຜລາວ. ຕໍ່ມາຫວຽດນາມຜິດກັບຈີນແລະລາວ ພວກເຮົາກໍ່ບໍ່ຖືກກັບຈີນນໍາຫວຽດນາມຄືກັນ, ຂັ້ນເທິງເພິ່ນກໍ່ໃຫ້ຢ່າເລີຍ, ທິດສະດີທີ່ໄດ້ຮຽນມາກໍ່ບໍ່ໄດ້ມານໍາໃຊ້ເລີຍ. ພວກລຸງຊຽງບຸນຮຽນຈົບປີ 1965 ປີ 1966 ແລ້ວກໍ່ກັບມາ, ພາສາຈີນບໍ່ໄດ້ຮຽນພວກເພິ່ນຮຽນການທະຫານຫຼາຍກວ່າໝູ່. ໃນເວລາສູນກາງໄດ້ຈັບ ທ່ານສັງຄໍາລູກລຸງສີທົນ ຢູ່ສູນກາງ(ຢູ່ລ້ອງມ້າ), ຊຶ່ງລາວກໍ່ໄປຮຽນຢູ່ຈີນ ຄືກັນກັບພວກລຸງຊຽງບຸນ, ແຕ່ລາວຮຽນຕ່າງຫາກ, ລາວເປັນຮຸ່ນອ້າຍ. ບາດມາໂຍ່, ໄດ້ຍິນຂ່າວວ່າແນວນັ້ນ ເຂົາກໍ່ຊິຈັບຮອດພວກລຸງຊຽງບຸນພິລະຕື່, ດັ່ງນັ້ນເອກກະສານຈໍານວນໜຶ່ງ ພວກລຸງຊຽງບຸນກໍ່ໄດ້ຈູດຖິ້ມ. ການທີ່ສູນກາງຈັບທ່ານສັງຄໍານັ້ນແມ່ນລຸງສີທົນເຫັນດີໃຫ້ຈັບ, ແຕ່ແລ້ວລາວກໍ່ໄດ້ເສຍຊີວິດຢູ່ໃນຄຸກເລີຍ. ການເສຍຊີວິດຂອງລາວນັ້ນ ບໍ່ແມ່ນຍ້ອນລາວຂ້າໂຕຕາຍຄືເຂົາວ່າດອກ ຍ້ອນ

ລາວເປັນເສັ້ນປະສາດ. ເວລານັ້ນພວກທີ່ຮຽນມາແຕ່ຈີນ ກໍ່ຍ້ານໄປຕາມໆກັນ, ລຸງຊຽງບຸນກໍ່ຈູດເອກກະສານຈຳນວນໜຶ່ງຖິ້ມ. ທະຫານອາກາດຜູ້ທີ່ມີເຊື້ອສາຍຈີນຈຶ່ງພາກັນອອກ. ພວກທີ່ເປັນເຊື້ອສາຍຈີນອອກໄປນັ້ນ ລຸງຊຽງບຸນຍັງຈື່ມີຄື: ຢ່າງໂບຍ, ສີນບູນຢູ່ທະຫານ ແລະທ້າວຕີ (ບຸນຕີເປັນແພດທະຫານ). ເວລາລຸງຊຽງບຸນກັບມາໃໝ່ນັ້ນ, ເພິ່ນກໍ່ຍັງຢູ່ທະຫານຄືເກົ່າຈົນກວ່າຂັ້ນເທິງໄດ້ແບ່ງເມືອງອ່າງຄຳອອກເປັນເມືອງເຊໂປນ ແລະ ເມືອງອ່າງຄຳ, ເວລານັ້ນລຸງຊຽງບຸນ ຈຶ່ງໄດ້ອອກຈາກທະຫານ ມາເປັນເລຂາພັກເມືອງເຊໂປນ ໃນທ້າຍປີ 1966.

ປີ1968 ລຸງຊຽງບຸນ ໄດ້ຖືກຍ້າຍໄປຢູ່ໂຄສະນາຂອງແຂວງຈຶ່ງມີສາມຄົນຮັບຜິດຊອບຄື: ມີສະຫາຍບົວທອງເປັນຫົວໜ້າ, ສະຫາຍຄຳພຸງເປັນຮອງຜູ້ທີໜຶ່ງຮັບຜິດຊອບວຽກງານໂຄສະນາ, ສ່ວນລຸງຊຽງບຸນແມ່ນຮອງຜູ້ທີສອງ ຮັບຜິດຊອບວຽກງານອົບຮົມການເມືອງ ຊຶ່ງແມ່ນສະຫາຍຄຳຜຸຍ, ຮັບຜິດຊອບວຽກງານໂຄສະນາ ແລະ ສະຫາຍບົວຄຳ ສາທຸພັນ ເປັນຫົວໜ້າລວມທົ່ວໄປ (ບົວຄຳຕາຍຢູ່ລ້ອງມ້າ) ເມື່ອຢຸດລົບທາງອາກາດ, ລຸງຊຽງບຸນມາຢູ່ເມືອງພິນ (ຢູ່ນອກເມືອງ) ເວລານັ້ນເພິ່ນເປັນເລຂາຄະນະພັກອ້ອມຂ້າງແຂວງ, ແລ້ວເພິ່ນໄປຢູ່ຫ້ອງການຈັດຕັ້ງທັງເປັນພະນັກງານຈັດຕັ້ງພ້ອມ. ເມື່ອເວລາຢຶດອຳນາດແລ້ວ ລຸງຊຽງບຸນລົງໄປພື້ນຖານ 3 ເດືອນ, ເພາະວ່າເພິ່ນກັບພໍ່ອຳໂລຢູ່ແນວຫຼັງ. ຈາກນັ້ນໄດ້ຈັດຕັ້ງພະນັກງານ, ຄັດເລືອກພະນັກງານແຕ່ລະເມືອງ ແລະ ຄັດເລືອກເອົາຕາແສງພ້ອມ, ຄັດເລືອກເອົາພະນັກງານໄປຢຶດອຳນາດ, ພະນັກງານເມືອງໃດ, ຜູ້ໃດກວດກາປະຫວັດແລ້ວໃຫ້ໄປຜ່ານລຸງອຳໂລ. ເມື່ອລຸງອຳໂລເຫັນດີແລ້ວກໍ່ສົ່ງມາໃຫ້ແນວໜ້າເພື່ອຢຶດອຳນາດ. ສ່ວນລຸງຊຽງບຸນກັບລຸງອຳໂລແມ່ນຢູ່ແນວຫຼັງ. ຕໍ່ມາລຸງຊຽງບຸນຖືກໄປເປັນເລຂາພັກເມືອງຄັນທະບູລີ ຢູ່ໂພນສິມ. ເວລານັ້ນ ອ້າຍຮອງເປັນເຈົ້າເມືອງ, ສ່ວນຮັບຜິດຊອບດ້ານການທະຫານ ແມ່ນສະຫາຍສີທັດ. ໃນໄລຍະເວລາທີ່ລຸງຊຽງບຸນໄປເປັນເລຂາຢູ່ຫັ້ນ ສັດຕູກໍ່ຍັງມາຍຸແຍ່ ແລະ ກໍ່ຄວາມວຸ້ນວາຍຢູ່ບໍ່ໄດ້ຂາດ, ຊ້ຳບໍ່ພໍ

ພັດມີທະຫານ ເມືອງຈຳພອນ 15 ຄົນ ໄດ້ໂຕນອອກໄປເປັນປະຕິການ (ປີ 1976). ພໍດີທ່ານພູນສີປະເສີດ ແລະທ່ານສີຊະນະ ລົງມາເປີດຮຽນຢູ່ໜອງສະພັງ, ລຸງຊຽງບຸນກໍ່ຖືກໄປຮຽນຢູ່ຫັ້ນ. ເມື່ອຮຽນຈົບແລ້ວພໍດີເພິ່ນກໍ່ຖືກແຕ່ງຕັ້ງໃຫ້ໄປຮັບຜິດຊອບສູນສຳມະນາ ນາຍພົນນາຍພັນຢູ່ອ່າງຄຳ ຊຶ່ງຕອນນັ້ນມີຜູ້ຮຽນສຳມະນາ 14 ຄົນ. ລຸງຊຽງບຸນໄປຢູ່ຫັ້ນໄດ້ປີໜຶ່ງ ແລ້ວໄດ້ເລື່ອນສູນຂຶ້ນກັບຕຳຫຼວດ, ແລະ ເງິນກິນຢູ່ນຸ່ງຖືຂຶ້ນກັບຕຳຫຼວດໝົດ. ປີ 1976 ເພິ່ນຍ້າຍສຳນັກໄປຢູ່ແກ້ງໄອ ໃກ້ກັບຊາຍແດນຫວຽດນາມ, ລຸງຊຽງບຸນກໍ່ໄດ້ຍ້າຍໄປປະຈຳຢູ່ພຸ້ນ, ໄປໂຮມກັບສູນສຳມະນາໂຕນັ້ນ ເພາະຢູ່ຫັ້ນມີພຽງ 13 ຄົນທໍ່ນັ້ນ. ລຸງຊຽງບຸນຢູ່ຫັ້ນໄດ້ປະມານປີປາຍ, ຂັ້ນເທິງບອກວ່າຈະສົ່ງຄົນໄປຮຽນສຳມະນາຕື່ມປະມານ 200-300 ຄົນ ໃນນັ້ນມີທັງແມ່ຍິງ, ນາຍຮ້ອຍ, ນາຍພັນ ແລະພວກນາຍຈ່າຜູ້ອື່ນໆ ທີ່ຄວນຈະດັດສ້າງ. ເມື່ອໄປເຕົ້າໂຮມກັນໝົດແລ້ວກໍ່ໃຫ້ເຂົ້າຮຽນ ແລະສຶກສາອົບຮົມກ່ອນ, ແຕ່ບໍ່ໄດ້ຂັງຄຸກ. ເວລາລຸງຊຽງບຸນຢູ່ສູນນັ້ນກໍ່ມີຄວາມຫຍຸ້ງຍາກຫຼາຍ, ຂອງແນວວ່າພວກດັດສ້າງ 200-300 ຄົນ. ນາຍພົນກິດ ແຫວນວົງສິດກໍ່ຢູ່ນຳພວກລຸງຊຽງບຸນນີ້ແຫລະ, ເຮັດແນວໃດລຸງຊຽງບຸນກໍ່ຕ້ອງຫາບ່ອນທີ່ພັກເຊົາໃຫ້ພຽງພໍ. ຝົນກໍ່ຕົກແຍະໆລຸງຊຽງບຸນຖາມໂຕເອງວ່າ: ເຮັດແນວໃດຈຶ່ງຊິບັນຊາຄົນໄດ້? ເຂົາກິນກໍ່ໃຫ້ 13 ກິໂລ ຕໍ່ເດືອນ ຕໍ່ຄົນ, ເງິນກໍ່ 13 ກີບຕໍ່ເດືອນຕໍ່ຄົນ, ໃຫ້ເຂົ້າກິນຕາມອັດຕານັກໂທດນີ້ລະ, ບາງຄົນກໍ່ອອກຈາກຄຸກທັງຈ່ອຍລົງກໍ່ປານນັ້ນ, ຄິດວ່າຊິເຮັດແນວໃດດີ? ຄະນັງແລ້ວ! ຕອນນັ້ນເຮືອນຊິຢູ່ກໍ່ບໍ່ມີ ລຸງຊຽງບຸນຈຶ່ງເອົາກອງຮ້ອຍໜຶ່ງມາເຮັດທາງເພື່ອຊິໃຫ້ລົດໄປສົ່ງເຂົ້າ, ອີກກອງຮ້ອຍໜຶ່ງກອງຮ້ອຍປາຍແມ່ນເຮັດເຮືອນ. ບາດເຮັດເຮືອນພ້າກໍ່ບໍ່ມີ, ຊິຢືມຂອງປະຊາຊົນເຂົາກໍ່ມີຈຳກັດ ແລະເຂົາກໍ່ບໍ່ຢາກໃຫ້ຢືມ. ລຸງຊຽງບຸນຈຶ່ງວາງແຜນການຈັດໃຫ້ໜ່ວຍໜຶ່ງໄປມ້າງແໜບລົດ ແລະ ຢືມຊື້ເຊົ່າອຸປະກອນຄ້ອນຕີນຳປະຊາຊົນ ແລ້ວມາຈັດຕັ້ງໜ່ວຍຕີເຫຼັກຕີພ້າຂຶ້ນ, ຈຶ່ງພໍມີເຫຼັກມີພ້າຈຳນວນໜຶ່ງ, ເພື່ອເຮັດເຮືອນ. ເວລານັ້ນລຸງຊຽງບຸນມີ 3 ກອງຮ້ອຍ, ສ່ວນພວກນາຍພົນນາຍພັນກໍ່ແມ່ນຢູ່ກັບພວກ

ລຸງຊຽງບຸນ, ແຕ່ບໍ່ໃຫ້ເຂົາຢູ່ລວມກັນ, ໃຫ້ຕັ້ງເຮືອນຢູ່ຄືລຸງຊຽງບຸນໂລດ, ບໍ່ໃຫ້ໄປແຊກແຊງກັບກອງຮ້ອຍອື່ນ, ຍ້ານມັນກຳໄດ້ກອງຮ້ອຍແລ້ວ ຈະເຮັດລັດຖະປະຫານຂຶ້ນ. ຈີນສະຫາຍແຕ້ຖາມລຸງຊຽງບຸນວ່າ ສະຫາຍບໍ່ຍ້ານບໍ່ເອົາລູກເອົາເມຍໄປຢູ່ນຳເຂົາ? ພວກສະຫາຍມີພຽງ 10 ກວ່າຄົນ, ບາດເຂົາມີເປັນສອງສາມກອງຮ້ອຍ ລ້ວນແຕ່ແມ່ນພວກດັດສ້າງທັງນັ້ນ. ພວກລຸງຊຽງບຸນຕອບວ່າ: ຍ້ານກໍ່ຊິເຮັດຈັ່ງໃດນາຍສັ່ງ ພັກສັ່ງຕາຍກໍ່ຕາຍ ແຕ່ທີ່ສຳຄັນແມ່ນຢູ່ນຳຫິວເຮົານີ້ລະ, ຖ້າໄປເຮັດແນວສະຫາຍທອງດີກໍ່ແມ່ນຕາຍແທ້, ລາວຮັກສາ 9 ຄົນກໍ່ບໍ່ຫລ້ອນ, ຖືກເຂົາຕີຫົວຕາຍສາ, ເມຍກໍ່ຖືກເຂົາຂົ່ມຂືນ.

ເມື່ອມີເຮືອນຢູ່ແລ້ວພວກລຸງຊຽງບຸນໄດ້ໄປຢ້ຽມເບິ່ງ ເຫັນເຂົາເດັດຜັກເຂົາເອົາຝຸຍຫວຽດນາມມາຕົ້ມນ້ຳຕົ້ມເຂົ້າ ແລະຕົ້ມແກງ, ແກງຜັກໃສ່ຊີ້ນປາເລັກໜ້ອຍ. ຢູ່ນີ້ເປັນໄລຍະຍາວ, ເຂົ້າບໍ່ພໍກິນ, ເງິນກໍ່ບໍ່ມີໃຊ້ຊິເຮັດແນວໃດ? ເຂົາທັງຫິວຢາກກິນເຂົ້າ, ມັນຂະມັງມາອາດໂສຕາຍ. ເມື່ອເປັນແນວນັ້ນລຸງຊຽງບຸນກໍ່ວາງແຜນເຮັດໄຮ່ເຮັດນາ, ເພີ່ມພູນຜະລິດຜົນ, ເຮັດສວນມັນຕົ້ນໝົດກອງພັນໃຫ້ໄດ້ 100,000 ຂຸມ, ແບ່ງກັນເຮັດເປັນແຕ່ລະກອງຮ້ອຍ ແລະເຮັດເປັນບຸກຄົນຂອງໃຜມັນອີກ. ຈາກນັ້ນເຂົາກໍ່ມີມັນຕົ້ນມັນດ້າງກິນ ເພື່ອມີກຳລັງໄປເຮັດວຽກເຮັດງານຕໍ່, ບາງເທື່ອພວກລຸງຊຽງບຸນກໍ່ຈັດຕັ້ງໃຫ້ເຂົາມີການມ່ວນຊື່ນຮ້ອງລຳທຳເພງ ແລະ ມີການຄ້າຂາຍໄປພ້ອມໆກັນ, ອັນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງເຂົາເຈົ້າໄດ້ດີຂຶ້ນ.

ເວລາທີ່ລຸງຊຽງບຸນເຮັດວຽກຢູ່ສູນສຳມະນານັ້ນ, ເພິ່ນນຸ່ງເຄື່ອງຕຳຫຼວດເລີຍ! ຈົນຮອດມື້ປະດັບຊັ້ນພໍ້ເພິ່ນຈຶ່ງໄດ້ອອກ. ໄລຍະນັ້ນລຸງຊຽງບຸນກຽມຊິມາຕໍ່ສູ້ກັບຈຸທິງຄຳ, ເພາະ 5- 6 ຄົນ ເຂົາເຮັດບໍ່ຖືກ, ແຕ່ລຸງຊຽງບຸນໄປຫາທອງສາ ເພື່ອປຶກສາກ່ອນແລ້ວທອງສາບອກວ່າ: ຢ່າໃດ໋! ຈັກໜ້ອຍເຂົາຈັບ. ລຸງຊຽງບຸນກໍ່ເລີຍເຊົາ ຂອງແນວວ່າໃນເວລານັ້ນ ລຸງຊຽງບຸນກໍ່ບໍ່ຮູ້ຈັກເນື້ອໃນເຂົາຢູ່ພຸ້ນດີ, ເພິ່ນພຽງແຕ່ມາປະຊຸມນຳແຂວງຊື່ໆ. ເພິ່ນເປັນຕຳຫຼວດໄດ້ 5-6 ປີຢູ່ກັບພວກສຳມະນາຈາກການຢູ່ເປັນເວລາດົນນານ, ພວກລຸງຊຽງບຸນໄດ້ຈັດຕັ້ງ

ໃຫ້ມີການຄ້າ, ມີທັງສິນຄ້າຂອງເມືອງແດ່ສົ່ງໃຫ້ ແລະ ຈັດຕັ້ງການມ່ວນຊື່ນນຳ. ເມື່ອເປັນແນວນັ້ນເຂົາກໍ່ອຸ່ນອ່ຽນ, ພໍມີຢູ່ມີກິນ, ທຸກຄົນກໍ່ຕຸ້ຍພີຂຶ້ນ. ພໍຮອດມື້ປະດັບຊັ້ນ ເວລານັ້ນທາງສູນກາງກໍ່ເອີ້ນລຸງຊຽງບຸນໄປທັດສະນະເລື່ອງວຽກຄຸມຂັງ, ແຕ່ເຂົາບໍ່ໄດ້ເຮັດໜັງສືໃຫ້ເພິ່ນ, ເພິ່ນກໍ່ເລີຍບໍ່ໄດ້ໄປ, ມີແຕ່ສະຫາຍແນມຄຸມຂັງນີ້ໄປ, ລາວໄປຖ້າລຸງຊຽງບຸນຢູ່ວຽງຈັນເພື່ອຮັບຄຳສັ່ງຈາກລຸງຊຽງບຸນ. ຮອດມື້ປະດັບຊັ້ນ, ໝົດແຂວງສະຫວັນນະເຂດເພິ່ນໃຫ້ຊັ້ນນາຍພັນຜູ້ໜຶ່ງເທົ່ານັ້ນຊຶ່ງເຮັດໃຫ້ສິງໄຂເກີດຄວາມບໍ່ພໍໃຈ. ຈາກນັ້ນສິງໄຂຈຶ່ງໄປເວົ້າກັບທົ່ງຄຳວ່າ: ຖ້າບໍ່ໃຫ້ນາຍພັນສິງໄຂຈະບໍ່ເຮັດການ. ສະນັ້ນທາງຂັ້ນເທິງເພິ່ນປະດັບໃຫ້ສິງໄຂ (ພຽງແຕ່ຈິດຊື່) ທາງຝ່າຍສິງໄຂໄດ້ກຽມສະຖານທີ່ຄັກແນ່, ແຕ່ເມື່ອຮອດມື້ອ່ານລາຍຊື່ປະດັບຊັ້ນພັດບໍ່ມີຊື່ຂອງສິງໄຂ. ບາດແລ້ວ ສິງໄຂກັບລຸງຊຽງບຸນຖືກສົ່ງອອກ, ລຸງຊຽງບຸນຖືກສົ່ງໄປຢູ່ຜາບັງ, ສ່ວນສິງໄຂຖືກສົ່ງໄປຢູ່ເມືອງພິນ. ຕໍ່ມາເພິ່ນຖອນລຸງຊຽງບຸນມາພັກຢູ່ຮ້ານຄ້າເມືອງເຊໂປນ ແລະພັກໄດ້ 3 ເດືອນພໍດີ, ຈາກນັ້ນ ລຸງຊຽງບຸນຖືກໄປສົ່ງເງິນຢູ່ບໍລິສັດເລກ 2 ຂອງສູນກາງ. ເຂົາໄປຂໍນຳອ້າຍບຸນຍັງວ່າ: ຢາກໄດ້ພະນັກງານແຂວງໄປຢູ່ນຳອ້າຍບຸນຍັງກໍ່ສົ່ງລຸງຊຽງບຸນໄປຢູ່ປ່າໄມ້ເລກ 2. ເວລານັ້ນລຸງໄມສຸກ ໄຊສິມແພງ ເປັນລັດຖະມົນຕີກະຊວງອຸດສາຫະກຳ ລຸງຊຽງບຸນມາຢູ່ປ່າໄມ້ເລກ 2 ໄດ້ 6 ປີ ແລ້ວກໍ່ອອກ. ເປັນຫຍັງລຸງຊຽງບຸນຈຶ່ງອອກ? ກ່ອນເພິ່ນຊິອອກເຫດການມັນເປັນແນວນີ້: ສະຫາຍທອງສາໄປປະຊຸມ, ຂັ້ນເທິງເພິ່ນເວົ້າດັ່ງນີ້: ພະນັກງານປະຫວັດສາດປະໄວ້ໃຜຢາກອອກກໍ່ອອກ. ເມື່ອລຸງຊຽງບຸນໄດ້ຮູ້ແນວນັ້ນ ເພິ່ນຄິດວ່າ: "ຕົນເອງຄວນອອກດີກວ່າເພາະຕົນເອງບໍ່ມີລະດັບການສຶກສາສູງ, ພາສາຕ່າງປະເທດກໍ່ບໍ່ໄດ້, ໄປຮຽນຢູ່ຈີນພຽງແຕ່ປີປາຍ ກໍ່ຍັງບໍ່ສາມາດເວົ້າໄດ້, ເພາະສ່ວນຫຼາຍກໍ່ໃຊ້ຄຳສັບລາຕິນ, ແຕ່ທາງຂັ້ນເທິງເພິ່ນຕ້ອງການຄົນທີ່ຮູ້ພາສາຕ່າງປະເທດ, ມີລະດັບການສຶກສາສູງ ຖ້າວ່າລໍຖ້າໃຫ້ເພິ່ນເຊີນອອກເຮົາຊິເປັນຝ່າຍເສຍປຽບ". ດັ່ງນັ້ນ, ລຸງຊຽງບຸນກໍ່ເລີຍຂຽນໃບຄຳຮ້ອງຂໍອອກພັກຜ່ອນບຳນານໃນປີ 1987. ຈາກນັ້ນເພິ່ນກໍ່ອອກເລີຍ, ແລ້ວມາ

ຢູ່ບ້ານຈີນມາຮອດທຸກມື້ນີ້. ປະຈຸບັນເພິ່ນເຮັດວຽກແນວໂຮມບ້ານ, ບໍ່ຢາກເຮັດເພິ່ນກໍ່ໃຫ້ເຮັດເພາະບໍ່ມີຄືນ. ຊີວິດຂອງລຸງຊຽງບຸນນີ້ແມ່ນລະອຽດລະອ້ຽວ, ຕຳຫຼວດກໍ່ເປັນ, ທະຫານກໍ່ເປັນ, ເຈົ້າເມືອງກໍ່ເປັນ, ຮອງເຈົ້າເມືອງກໍ່ເປັນ, ເລຂາພັກກໍ່ເປັນ, ການຄ້າກໍ່ເປັນ, ປ່າໄມ້ກໍ່ເປັນ, ຊິມລົດຊາດໝົດເລີຍໃນຊີວິດນີ້.

ກ່ອນລຸງຊຽງບຸນ ຊິອອກບຳນານ, ເພິ່ນຄິດວ່າຢາກໄດ້ເຮືອນຫຼັງໜຶ່ງເພິ່ນເລີຍໄປຂໍນຳລຸງໄມສຸກ ໃນເວລາພວກເພິ່ນໄປວຽກສູນກາງ. ເພາະຕອນນັ້ນ ທາງກະຊວງໃຫ້ແຕ່ລະພະແນກປ່າໄມ້ໄປລວມ, ໝູ່ເພື່ອນຂອງເພິ່ນເຂົາເຄີຍໄປປະຊຸມປ່າໄມ້, ເຂົາເຈົ້າຮູ້ດີລຸງຊຽງບຸນກໍ່ເລີຍປຶກສານຳໝູ່ເພື່ອນວ່າເຮົາອອກຢາກໄດ້ເຮືອນຊານ ເຂົາບອກວ່າ: ໃຫ້ສະຫາຍຂໍແມ່! ເພາະດຽວນີ້ເພິ່ນມີນະໂຍບາຍໃຫ້ຜູ້ໜຶ່ງສາມຕົ້ນ. ເມື່ອລຸງຊຽງບຸນຮູ້ແບບນັ້ນແລ້ວ ເພິ່ນຈຶ່ງຊຽນຄຳຮ້ອງຂໍ, ທາງສູນກາງກໍ່ແກ້ໄຂໃຫ້ລຸງຊຽງບຸນສາມຕົ້ນ. ຈາກນັ້ນລຸງຊຽງບຸນມອບໃຫ້ອ້າຍນ້ອງປ່າໄມ້ເລກ 2 ຕັດໄມ້ສາມຕົ້ນໄດ້ປະມານ 60 ແມັດກ້ອນ, ເວລານັ້ນລາຄາໄມ້ແປຮູບແມ່ນ 7,500 ກີບ ຕໍ່ແມັດກ້ອນ. ລຸງຊຽງບຸນເລີຍເອົາໄມ້ 60 ແມັດກ້ອນນັ້ນຂາຍເຂົ້າໂຮງເລື່ອຍເພື່ອເອົາເງິນໄປຖອກໃຫ້ຄ່າໄມ້ແປຮູບ, ເຫຼືອຈາກນັ້ນ ກໍ່ແມ່ນເອົາມາໝູນໃຊ້ ເປັນຄ່າແຮງງານ ປຸກສ້າງເຮືອນ ແລະອື່ນໆ. ສ່ວນສາຍພັກ ລຸງຊຽງບຸນຍັງບໍ່ທັນໄດ້ອອກເທື່ອ, ຍັງຮ່ວມຊີວິດນຳພັກຢູ່ ຊຶ່ງປະຈຸບັນຍັງມີເພິ່ນ (ຊຽງບຸນ) ແລະ ສະຫາຍພູວາ, ສ່ວນສະຫາຍອິນປອງຕາຍແລ້ວ ໂດຍໜ່ວຍພັກດັ່ງກ່າວນີ້ ແມ່ນຂຶ້ນກັບຫ້ອງວ່າການເມືອງ.

ເມື່ອບໍ່ດົນນີ້ ພວກລູກຫຼານກໍ່ຖາມເຈາະຈີ້ມລຸງຊຽງບຸນວ່າ: ສູນກາງໃຫ້ຫຍັງແດ່? ເພິ່ນກໍ່ຕອບເຂົາຊື່ໆໄປວ່າ: ຂ້ອຍໄດ້ແຕ່ໄມ້ 60 ແມັດກ້ອນພໍເຮັດເຮືອນເຮັດຊານເທົ່ານີ້ລະ. ສ່ວນວ່າລົດລາງນັ້ນແມ່ນຂໍກໍ່ບໍ່ໄດ້; ປີກາຍນີ້ລຸງຊຽງບຸນໄດ້ໄປຫາອ້າຍບຸນຍັງສາມເທື່ອ, ແຕ່ບໍ່ໄດ້ພົບແລ້ວກໍ່ຢ່າ. ເພິ່ນຄິດວ່າຄືຊິແມ່ນຂັ້ນເທິງມີວຽກຫຼາຍແນ່. ເພາະວ່າຕອນລຸງຊຽງບຸນໄປຫາຢູ່ຫ້ອງວ່າການສຳນັກນາຍົກ, ຜູ້ເປັນເລຂາບອກວ່າເພິ່ນບໍ່ຢູ່. ລຸງຊຽງບຸນໄປຫາຫອງເຄນ

ຫຼານເຂີຍຂອງເພິ່ນຢູ່ກຳແພງນະຄອນ, ແລ້ວເພິ່ນໃຫ້ລູກຊາຍທ້າວເຄນພາຊຽງບຸນໄປພົບທ່ານບຸນຍັງແຕ່ເພິ່ນບໍ່ຢູ່. ບາດລຸງຊຽງບຸນໄປເທື່ອທີສອງ ໄປນອນຢູ່ເຮືອນລຸງສີທົນສອງຄືນ, ແລ້ວໃຫ້ລູກຊາຍຂອງລຸງສີທົນພາໄປກໍ່ບໍ່ມີເວລາພົບອີກ ລຸງຊຽງບຸນໄດ້ຄິດວ່າ: ແຕ່ກ່ອນສະຫາຍບຸນຍັງຮູ້ຈັກກັບຂ້ອຍດີຢູ່ນໍ່າ, ລຸງຊຽງບຸນໄດ້ຂໍໂຄຕ້າລິດ ຕັ້ງແຕ່ສະໄໝສະຫາຍບຸນເຄນຍັງຮັບຜິດຊອບດຳລັດພຸ້ນ ເພິ່ນວ່າບຸນເຄນເຊັນແລ້ວ ແຕ່ກໍ່ຍັງບໍ່ທັນໄດ້ເທື່ອ, ລຸງຊຽງບຸນຢາກໄດ້ເງິນໄປເຮັດຝາຍ, ເຮັດນາເພິ່ນໄປຂໍຢືມເທື່ອໜຶ່ງຂັ້ນເທິງໃຫ້ 300,000 ກີບ, ເທື່ອທີສອງຂັ້ນເທິງໃຫ້ 500,000 ກີບ, ຂັ້ນເທິງຍັງໃຫ້ຕິດໜີ້ຢູ່, ເພິ່ນຊິຕັດເອົາຄືນໃນແຕ່ລະງວດແນວນັ້ນ. ລຸງຊຽງບຸນມາຢູ່ໃນເມືອງນີ້ ຄວາມຈິງມັນກໍ່ເປັນໄປຄືແນວນີ້ລະ. ຢູ່ທາງເມືອງນີ້ເພິ່ນກໍ່ບໍ່ໄດ້ປະຖິ້ມລຸງຊຽງບຸນດອກ. ມີກອງປະຊຸມເພິ່ນກໍ່ເຊີນລຸງຊຽງບຸນໄປຮ່ວມ, ກໍ່ໄດ້ອອກຄຳຄິດຄຳເຫັນຢູ່, ແຕ່ວ່າລຸງຊຽງບຸນເພິ່ນອອກຈັກຊິຖືກຈັກຊິຜິດກໍ່ບໍ່ຮູ້. ຢູ່ເມືອງເຊໂປນປະຈຸບັນມີພະ ນັກງານບຳນານ 4 ຄົນ (ຊຽງບຸນ, ອິນຕອງ, ຈັນຍົມ,ຄຳມຸນ) ເປັນພວກທີ່ມັກເວົ້າມັກຕຳນິ, ຢາກໃຫ້ມັນດີບໍ່ຢາກໃຫ້ມັນຊົ່ວນັ້ນລະ, ແຕ່ມັນອາດຈະບໍ່ຖືກກັບໝູ່ປານໃດ, ລຸງຊຽງບຸນພັດມັກເວົ້າແຕ່ອັນເກົ່າແດ່, ແມ່ນຢູ່ສູນກາງເພິ່ນວ່າປ່ຽນແປງຮອບດ້ານ, ແຕ່ເພິ່ນເຫັນວ່າຮຽນເອກກະສານກໍ່ຍັງແມ່ນອັນເກົ່າຢູ່. ປີກາຍນີ້ມາລຸງຊຽງບຸນໄດ້ຍິນສູນກາງເວົ້າຖືກ, ທິດທາງຈັ່ງຊັ້ນຈັ່ງຊີ້ ລຸງຊຽງບຸນຊົມເຊີຍ, ແຕ່ກ່ອນໄດ້ຮຽນເອກກະສານ ລາວຈົ່ມທ້ວງວ່າໃຜເປັນຜູ້ແຕ່ງເອກກະ ສານຍັງຄືເກົ່າ, ຄືຄາວເຮັດການປະຕິວັດ, ແຕ່ຂອດປະຕິບັດຕົວຈິງແມ່ນບໍ່ຄັກປານໃດ, ຂັ້ນເທິງວາງ ຂັ້ນກາງປະຊຸມ ຂັ້ນລຸ່ມຕັ້ງໃຈກິນ. ເລື່ອງໄດ້ແມ່ນໄດ້, ແຕ່ບໍ່ຖືກກັບແນວຄິດປະຊາຊົນ ແລະ ສູນກາງວາງອອກ. ນັ້ນລາວວ່າ ຄືມັນຂັດກັບແນວທາງຂອງຂັ້ນເທິງ, ປະຊາຊົນວິພາກວິຈານຫຼາຍ. ລາວວ່າການຊ່ວຍເຫຼືອຕ່າງໆຮອດປະຊາຊົນໜ້ອຍ. ລາວວ່າດຳລັດ 194 ໄປເຫັນຢູ່ແຂວງພຸ້ນ, ດຳລັດຕາມຫຼັງມັນຢູ່ຫ້ອງການແຮງງານນີ້, ຄົ້ນຫາຈົນເມື່ອຍບໍ່ເອົາມາເຜີຍແຜ່.

ສຳລັບຫຼຸນການີ້ແມ່ນໄດ້ຫຼຸນໄຊອິດສະຫຼະ 1 ໜ່ວຍ ຊຶ່ງເປັນຜົນງານຂອງລາວເອງໃນບັ້ນຮົບລຳເຊີນ ແມ່ນຢູ່ແຂວງເພິ່ນໄດ້ແຕ່ງຕັ້ງ ພວກລຸງຊຽງບຸນ ມາຊ່ວຍລຳເຊີນ 3 ຄົນຄື: ພັນເອກຄຳປານ, ຊຽງບຸນ (ລາວເອງ) ແລະມະຫາຍິນກັບທະຫານຈຳນວນໜຶ່ງ ເພື່ອມາຊ່ວຍເອົາປະຊາຊົນອອກຈາກເຂດກັນດານ, ອອກຈາກເຂດສົງຄາມ.

ສະໄໝລຸງຊຽງບຸນເຮັດການປະຕິວັດນັ້ນ, ອ້າຍນ້ອງຂອງລາວຈຳນວນໜຶ່ງກໍ່ໄດ້ອອກໄປເຮັດການປະຕິວັດຄືກັນເຊັ່ນ: ມີນ້ອງຜູ້ໜຶ່ງລາວໄດ້ອອກໄປເຄື່ອນໄຫວກ່ອນລຸງຊຽງບຸນ, ໄປຢູ່ສອງແຂວງເຕົ້າໂຮມ, ລາວຖືກເຂົ້າຮ່ວມກອງພັນທີ1ຢູ່ເມືອງຊຽງເງິນ, ລາວເປັນແພດປະຈຳຢູ່ກອງຮ້ອຍ, ແຕ່ຖືກນາຍພາຍອມຈຳນົນຕໍ່ສັດຕູລາວຈຶ່ງຖືກຄຸກແລ້ວມາຢູ່ວຽງຈັນ, ມີໝູ່ຂອງລາວທີ່ໂຕນເຂົ້າມາຢູ່ຄຳມ່ວນ, ໃນເວລານັ້ນລຸງຊຽງບຸນເຂົ້າສູນແລ້ວໄປພົບຜູ້ທີ່ໂຕນມາ, ຜູ້ນັ້ນເວົ້າວ່າ: ເພິ່ນພົບນ້ອງຊາຍນ້ອງຂອງລຸງຊຽງບຸນແລ້ວຄົນຈ່ອຍນ້ອຍໆ, ສຸຂະພາບບໍ່ສົມບູນປານໃດ. ນ້ອງຊາຍລຸງບຸນເວົ້ານຳຜູ້ນັ້ນວ່າບໍ່ໄດ້ເມືອອີກແລ້ວ. ນ້ອງລຸງຊຽງບຸນຕີກັນຖືກມັນຕາຍຢູ່ພະລານ ຖືກຢູ່ກັບບ່ອນນອນລຸກບໍ່ໄດ້ເລີຍ, ບໍ່ໄດ້ເປີດຮອດຜ້າ. ບາດປົດປ່ອຍຍຶດອຳນາດແລ້ວພີ້ ລຸງຊຽງບຸນຈຶ່ງໄດ້ໄປຖາມຫານ້ອງຊາຍລາວຢູ່ສະຫວັນ, ໝູ່ນ້ອງຈຶ່ງບອກໃຫ້ວ່າຕາຍແລ້ວ, ຍັງແຕ່ເມຍມັນຢູ່ແຄມທາງຫັ້ນລະ. ລຸງຊຽງບຸນຈຶ່ງເລີຍໄປຊອກຖາມຫາລູກເມຍນ້ອງຊາຍ ແຕ່ໄປບ້ານເວົ້າວ່າໄດ້ລູກໜຶ່ງ, ສ່ວນແມ່ກໍ່ເອົາພໍ່ໃໝ່ແລ້ວ. ເມື່ອລູກນ້ອງຊາຍຂອງລຸງຊຽງບຸນຮູ້ຂ່າວ ລາວກໍ່ພາແມ່ມາຫາລຸງຊຽງບຸນໂລດ, ທັງຖືຮູບພໍ່ມາໃຫ້ລຸງຊຽງບຸນເບິ່ງພ້ອມ, ແມ່ນແລ້ວຈາກນັ້ນຫຼານກໍ່ຖືເຄື່ອງມາຢູ່ນຳລຸງຊຽງບຸນເລີຍ. ດຽວນີ້ຫຼານລຸງຊຽງບຸນໄດ້ໄປຢູ່ແກ່ນທ້າວພຸນ. ລາວເປັນຕຳຫຼວດ. ກ່ອນຫຼານຜູ້ນັ້ນລາວຊິໄປພັດມີພີ່ນ້ອງຢູ່ທາງພະລານແກ້ງຂາມນີ້ມາຢາມ, ຊຶ່ງຜູ້ນັ້ນເປັນຜູ້ບັນຊາການຕຳຫຼວດ ດຽວນີ້ຜູ້ນີ້ລາວເອົາຫຼານໄປຢູ່ໄຊຍະບູລີແລ້ວ, ໄດ້ຊັບຊ້ອນໄປຢູ່ດ່ານລາວໄທ, ຍ້າຍໄປຢູ່ດ່ານນັ້ນດ່ານນີ້ ສຸດທ້າຍກໍ່ຍ້າຍໄປຢູ່ດ່ານເມືອງໝໍ້ແລ້ວເອົາເມຍຢູ່ນັ້ນ, ແຕ່ງງານໄດ້ສາມເດືອນກໍ່ພາເມຍມາຢາມ

ແມ່ຢູ່ແກ້ງຂາມເດ, ຫຼານນັ້ນກໍ່ມາແວ່ມາຫາລຸງຊຽງບຸນນີ້, ມັນດຳລົງຊີວິດນີ້ແຕ່ສະໄໝປະຖົມພຸ້ນ. ລຸງຊຽງບຸນຜູກຂໍ່ຕໍ່ແຂນໃຫ້ຫຼານຊາຍແລ້ວກໍ່ເມືອ, ຊຶ່ງເວລານັ້ນລຸງຊຽງບຸນບອກວ່າໂຕເມືອຮອດເຮືອນແລ້ວໂຕໂທຫາເຮົາແດ່, ແຕ່ວ່າຈົນຮອດດຽວນີ້ລຸງຊຽງບຸນຈຶ່ງຂ່າວຄາວຖາມຫາ, ແມ່ເຖົ້າວ່າ: (ເມຍລຸງຊຽງບຸນ) ເອີຍ! ເຖົ້າຖາມລຳລີລຳໄລຫຍັງນຳມັນ! ຂອງແນວວ່າລຸງຊຽງບຸນຄິດຮອດຄິດເຖິງຫຼານກໍ່ຖາມຫາລະບໍ ລຸງຊຽງບຸນວ່າ: ລາວບໍ່ມີເງິນຊື່ໆ ຖ້າລາວມີເງິນແມ່ ລາວຊິໄປຊອດໄປຫານຳເອົາເອງ. ຫຼານໄດ້ບອກລຸງຊຽງບຸນວ່າຍ້ານບໍ່ໄດ້ມາແລ້ວ, ເພາະວ່າຢູ່ເຮືອນຂອງເຂົານັ້ນມີສາມອ້າຍນ້ອງ, ເອື້ອຍກໍກອອກເຮືອນແລ້ວ, ເອື້ອຍຜູ້ທີສອງໄປຢູ່ກຸງເທບພຸ້ນ, ສ່ວນຜູ້ທີ່ສາມກໍ່ແມ່ນເມຍຫຼານເອງ, ສະນັ້ນຫຼານຕ້ອງລ້ຽງພໍ່ເຖົ້າແມ່ເຖົ້າ. ໄຮ່ນາຕາກ້າກໍ່ກວ້າງແດ່, ເຂົ້າກິນກໍ່ພໍກິນແລ້ວ, ລຸງຊຽງບຸນຄິດວ່າຄືຊິໄດ້ແນວພໍ່ມັນລະໄປແລ້ວກໍ່ບໍ່ໄດ້ມາເລີຍ. ລຸງຊຽງບຸນຈະເວົ້າເຖິງຄວາມຮູ້ສຶກແລ້ວ: ດຽວນີ້ລຸງຊຽງບຸນຮູ້ສຶກຕໍ່ກັບຊີວິດຕົນເອງວ່າ: ຕົນເອງຄືຊິດຳລົງຊີວິດແບບນີ້ໄປຫັ້ນລະ, ຊິສະໝັກກັບ ພັກ-ລັດເພິ່ນກໍ່ຄືຊິບໍ່ຕອບສະໜອງຫຍັງໃຫ້ເພິ່ນອີກແລ້ວ, ລາວວ່າ: ເລື່ອງຢາກໄດ້ອັນນັ້ນ, ຢາກໄດ້ອັນນີ້ລາວກໍ່ຢາກໄດ້ຢູ່. ລາວວ່າ: ໄປຫາອ້າຍບຸນຍັງ ຄິດວ່າຈະໄປຂໍໃຫ້ເພິ່ນຊ່ວຍລົດໄຖນາ, ຊິໃຫ້ຕິດໜີ້ກໍ່ຊິຕິດ, ແຕ່ພັດບໍ່ໄດ້ພົບກໍ່ຢ່າໄປສາ. ລາວວ່າ: ສ່ວນບ່ອນລີ້ງເຄີຍກໍ່ຫຼາຍຄົນຢູ່ ນາຍພົນລະຄອນກໍ່ພີ່ນ້ອງດຽວກັນແຕ່ຄິດວ່າໄປຫາກໍ່ຊິຄືດຽວນີ້ແລະ, ລາວວ່າປະຈຸບັນ ກໍ່ອາໃສແຕ່ເງິນເບ້ຍບຳນານຂອງຕົນເອງນີ້ລະ ເດືອນໜຶ່ງໄດ້ສອງແສນປາຍ (ຂັ້ນເງິນເດືອນ 4/13), ງວດໜຶ່ງກໍ່ໄດ້ປະມານ 790,000 ກີບ.

ຄວາມຮູ້ສຶກ ຂອງລຸງຊຽງບຸນນີ້ ຊິວ່າເພິ່ນກິນແໜງກໍ່ບໍ່ແມ່ນ, ເພິ່ນບໍ່ໄດ້ກິນແໜງດອກ, ນະໂຍບາຍເງິນເດືອນເພິ່ນກໍ່ໃຫ້ແລ້ວ, ແຕ່ວ່າຄວາມຢາກໄດ້ຂອງເພິ່ນກໍ່ຢາກໄດ້ຫັ້ນແລ້ວ, ເມື່ອສົມທຽບໃສ່ເບິ່ງໝູ່ຄູ່ຂອງເພິ່ນ ລຸ້ນລາວຄາວດຽວແລ້ວ ເຮົາເລີຍເວົ້າໄປທົ່ວທິບ, ເບິ່ງແມ່ເຮືອນຂອງເພິ່ນສໍ່າຮັ່ງມີກາ, ສໍ່າເຮືອນຄົວຂອງເພິ່ນຜູ້ຮັ່ງ. ຖ້າສົມທຽບກັບເພື່ອນທວຽດນາມ, ລັດຖະບານ

ທ່ວງດນາມ ແມ່ນເຂົາປະຕິບັດນະໂຍບາຍຕໍ່ຜູ້ມີຄຸນງາມຄວາມດີຕໍ່ປະເທດຊາດ ດີກວ່າຢູ່ບ້ານເຮົາຫຼາຍ. ແຕ່ຖ້າມີການສົມທຽບສ່ຳເພິ່ນນີ້ເຮັດການປະຕິວັດມາ ດົນປານນີ້, ເພິ່ນຄືຊິໄດ້ອັນນັ້ນອັນນີ້ແລ້ວ, ສະນັ້ນຖ້າຊິເວົ້າວ່າລຸງຊຽງບຸນຂັດ ຂ້ອງນຳພັກນຳລັດແລ້ວ ຊິເຮັດແນວນັ້ນແນວນີ້ ແມ່ນເພິ່ນບໍ່ເຮັດແລ້ວ ເຖົ້າ ປານນີ້ແລ້ວ. ເພິ່ນວ່າ: ລັດຖະບານລ້ຽງໄດ້ສ່ຳໃດກໍ່ບຸນທົວແລ້ວ, ຂັ້ນເທິງໃຫ້ກໍ່ ສາທຸຍໍມື້ແລ້ວ, ລຸງຊຽງບຸນໄປຂໍໂທຕ້າລົດນຳແຂວງເວລານີ້ເຂົາບອກວ່າແກ້ໄຂ ໃຫ້ແຕ່ວິລະຊົນ, ນັກຮົບແຂ່ງຂັນ. ຊິ່ວຊິຮອດພວກສະຫາຍອາດຈະຕາຍກ່ອນ ຕາຍໝົດແລ້ວ. ເພິ່ນໄປຮອດກະຊວງ, ໄປຫາສຳນັກງານນາຍົກເພິ່ນເຮັດໜັງສື ໄປຫາກະຊວງການຄ້າ, ໃຫ້ກະຊວງການຄ້າເຮັດສະໂນດນຳສິ່ງໃຫ້ການຄ້າ ແຂວງ, ເພື່ອໃຫ້ທາງແຂວງຄົ້ນຄວ້າ. ເພິ່ນເວົ້າວ່າ: ໄປເວົ້າມາກໍ່ສ່ຳໄລ່ແຂກ ລົງເຮືອນເທົ່ານັ້ນແລ້ວ, ເພິ່ນໄປຫາໝູ່ຜູ້ທີ່ໄປເຮັດການກ່ອນເພິ່ນເຊັ່ນ: ສະ ຫາຍຫຼຸຍສຸມີ ພີ່ນ້ອງຂອງເພິ່ນຢູ່ໜອງບອນ ເຂົາກໍ່ບໍ່ທັນໄດ້ຄືກັນ. ເມື່ອເປັນ ເຊັ່ນນີ້ ເພິ່ນເລີຍມາຄົ້ນຄວ້າກັບລູກເພິ່ນ, ລູກເພິ່ນກໍ່ວ່າຢາກໄດ້ເພາະຈຳເປັນ ເລີຍຂາຍຄວາຍ 3 ໂຕ ເພື່ອຊື້ລົດໄຖນາ. ດຽວນີ້ເພິ່ນເຮັດນາປູກເຂົ້າກໍ່ກຸ້ມກິນ ແລ້ວ ເພິ່ນຢູ່ໄປຈັ່ງຊີ້ລະພວກສະຫາຍເອີຍ.

ລຸງຊຽງກູ່

ເຜົ່າຜູ້ໄທ

(ບ້ານໂນນໄຊ ເມືອງພິນ ແຂວງສະຫວັນນະເຂດ)

ປະຈຸບັນລຸງຊຽງກູ່ ຢູ່ບ້ານໂນນໄຊ ເມືອງພິນ ແຂວງສະຫວັນນະເຂດ, ເພິ່ນເປັນຊົນເຜົ່າຜູ້ໄທ. ເວົ້າເຖິງສະພາບການເຄື່ອນໄຫວຂອງເພິ່ນ ຕອນຢູ່ນຳພໍ່ແມ່ນັ້ນ ມີຫຼາຍຢ່າງແຕ່ເພິ່ນຈື່ໄດ້ວ່າ: ຄອບຄົວຂອງພໍ່ແມ່ເພິ່ນແຕ່ກ່ອນແມ່ນທຸກຍາກທີ່ສຸດ, ເປັນຊາວໄຮ່, ບໍ່ແມ່ນຊາວນາ. ແຕ່ກ່ອນຄອບຄົວຂອງເພິ່ນຢູ່ເມືອງອ່າງຄຳ, ເພິ່ນຍ້າຍມາຢູ່ບ້ານນາເຕີ້(ນາໃຕ້), ກໍ່ຍັງເຮັດໄຮ່ ແລະ ທຸກຄືເກົ່າ, ຂາດເຂີນແຕ່ລະປີ, ເຂົ້ານ້ຳຊ້ານມປາອຶດ, ປີໜຶ່ງກຸ້ມກິນໄດ້ແຕ່ 6 ເດືອນ, ນອກນັ້ນເພິ່ນມີແຕ່ໄປຂໍກິນ. ມູນມໍລະດົກຂອງພໍ່ແມ່ເພິ່ນເວລານັ້ນມີແຕ່ງົວ 2 ໂຕ, ພໍ່ແມ່ເພິ່ນເປັນຄົນໃຈດີບໍ່ໄດ້ຮ້າຍໄດ້ດ່າລູກໆ. ສະນັ້ນອ້າຍນ້ອງພວກເພິ່ນກໍ່ບໍ່ເຄີຍຜິດຖຽງກັນ, ບໍ່ຕີກັນ. ລຸງຊຽງກູ່ເອງບໍ່ເຄີຍຄຽດໃຫ້ພໍ່ແມ່ຈັກເທື່ອ. ມີແຕ່ພໍ່ແມ່ບອກສອນວ່າ: ລູກເອີຍ ເຮັດໄຮ່ເຮັດນານຳກັນເດີ, ໃຫ້ກຸ້ມຢູ່ກຸ້ມກິນເພາະພວກເຮົາທຸກຍາກ. ແລະພວກເພິ່ນກໍ່ພາກັນປະຕິບັດຕາມພໍ່ແມ່ບອກສອນຫັ້ນແລ້ວ, ເຮັດໄປຫັ້ນແລ້ວ. ເວລານັ້ນລຸງຊຽງກູ່ອາຍຸປະມານ 9-11 ປີ ໄດ້ໄປຖາງໄຮ່ຖາງສວນນຳພໍ່ແມ່ ແລະຊ່ວຍແມ່ຊອກຢູ່ຫາກິນນຳເພິ່ນເປັນຕົ້ນສ້ອນປາຕາມຫ້ວຍນ້ອຍຫ້ວຍໃຫຍ່ ແລະເພິ່ນເຮັດກະດົດກະຕ່ຳໃສ່ໝູ, ເຮັດແຮ້ວນົກແຮ້ວໝູນຳພໍ່ເພິ່ນກໍ່ພໍໄດ້ກິນ. ພໍ່ເພິ່ນເຄີຍສອນໃຫ້ເພິ່ນເລື່ອງຈັກສານຕ່າງໆ ດັ່ງນັ້ນເວົ້າເລື່ອງສານກະຕ່າກະບຸງເພິ່ນກໍ່ເປັນ, ເຮັດກະບົ້ງ, ເຮັດຟືມ, ເຮັດກີ່ເພິ່ນເປັນໝົດ, ເຮັດດັ້ງເຮັດຈໍ່, ຮຽນນຳພໍ່, ທຳອິດກໍ່ພໍ່ເພິ່ນພາຈັກຕອກແລະພາເຮັດ ຕໍ່ມາຕົນເອງເພິ່ນກໍ່ເຮັດເອງ.

ສຳລັບເຄື່ອງນຸ່ງຫົ່ມຂອງຄອບຄົວແມ່ນແມ່ເພິ່ນເປັນຜູ້ຕ່ຳ ແລະ ແມ່ນເພິ່ນເຮັດເອົາເອງ. ແຕ່ກ່ອນນັ້ນບໍ່ໄດ້ຊື້ດອກຜ້າແພ ແລະສົ້ງເສື້ອນັ້ນແມ່ເພິ່ນຈະເຮັດເອງ. ພວກເພິ່ນນຸ່ງສົ້ງດຳເສື້ອດຳ ຊຶ່ງແມ່ເປັນຜູ້ຕ່ຳຫູກມາຕັດເປັນສົ້ງ

ເສື້ອໃຫ້ໝິດຄອບຄົວໃສ່ສິດງອກັນ ເປັນສິ່ງເສື້ອດຳຄັ້ນໝາກເກືອນີ້ແລ້ວ [117] .
ລຸງຊຽງກູ່ນີ້ຮັກພໍ່ກັບຮັກແມ່ແມ່ນສໍ່າກັນ, ແຕ່ແມ່ນີ້ລາວມັກເວົ້າລຳລີລຳໄລແຕ່ລາວບອກກໍບອກກີ, ສ່ວນພໍ່ນັ້ນລາວບໍ່ສູ້ເວົ້າລໍ່າໄລປານໃດ.

ເມື່ອມີງານດອງງານບຸນໃນບ້ານ ພໍ່ແມ່ກໍ່ບໍ່ໄດ້ຫ້າມບໍ່ໃຫ້ໄປຫຼິ້ນໄປຫົວນຳໝູ່, ພໍ່ແມ່ເພິ່ນມີແຕ່ວ່າໄປກໍ່ໄປເບິ່ງ, ຢ່າຜິດໝູ່ຜິດຄູ່,ຢ່າຜິດບ້ານຜິດເມືອງ, ລາວບອກແນວນັ້ນ. ເຫຼົ້າຢາລຸງຊຽງກູ່ກໍ່ບໍ່ເຄີຍເມົາ, ບໍ່ຮູ້ກິນເຫຼົ້າ. ເວລາໄປບຸນໄປງານມີຟ້ອນລຳເພິ່ນກໍ່ເຮັດຕາມໝູ່, ລຸງຊຽງກູ່ເປົ່າແຄນພໍເປັນທຳມະດາ. ເພິ່ນບໍ່ມັກຜິດໝູ່ຜິດຄູ່, ໄປໃສໝູ່ກໍ່ຮັກແພງເພິ່ນ. ເວລາເພິ່ນອາຍຸ 11 ປີ ເພິ່ນໄປບວດ, ອາຍຸ 16 ປີ ເພິ່ນສິກ. ສິກມາເພິ່ນໄປເຮັດໄຮ່ເຮັດນານຳພໍ່ແມ່ເພິ່ນປີໜຶ່ງ, ອາຍຸ 17 ປີ ເພິ່ນໄປເຮັດການປະຕິວັດ.

ກ່ອນລຸງຊຽງກູ່ຈະເຂົ້າໄປບວດຍ້ອນເພິ່ນເອງເປັນໄຂ້ແລ້ວພໍ່ເພິ່ນຈຶ່ງພາໄປບວດ. ລຸງຊຽງກູ່ເຂົ້າບວດໄດ້ 5 ປີ, ເປັນຊຽງ. ເວລາເພິ່ນບວດຄູບາກໍ່ຮັກແພງເພິ່ນເພາະເພິ່ນຮຽນເກັ່ງ, ຊຽນໜັງສືນີ້ບໍ່ໄດ້ຜິດ, ໝູ່ເພິ່ນຈົນໄດ້ມານິບ ຂໍຮຽນນຳເພິ່ນເພາະເຂົາຮຽນບໍ່ໄດ້. ຍາຄູບໍ່ໄດ້ຮ້າຍລຸງຊຽງກູ່ຈັກເທື່ອ, ເພິ່ນປະຕິບັດສິນ 5 ສິນ 8 ແລະກໍ່ປະຕິບັດຕາມຄຳບອກຂອງຍາຄູຄືຕັກນ້ຳ, ຖ່າຍງຽງ, ຖ່າຍຫຍັງໃຫ້ຄູບາ, ປັດກວາດກຸຕິ, ປັດກວາດເຮືອນຊານ. ຕອນບວດນັ້ນ ລຸງຊຽງກູ່ເທດກໍ່ເກັ່ງ, ເທດເຂົ້າສາກເຂົ້າປະດັບດິນເປັນໝົດ, ເພິ່ນຮຽນໜັງສືສູດນີ້ເປັນໝົດ. ລຸງຊຽງກູ່ຫັ້ນຢາກສິກ ຄູບາກໍ່ບໍ່ຢາກໃຫ້ສິກປານໃດ ເພາະເພິ່ນແພງ. ລຸງຊຽງກູ່ວ່າໂອຍບໍ່ໄດ້ຄູບາເອີຍ, ຢາກສິກແລ້ວ, ຈຳເປັນຄູບາກໍ່ວ່າເອົາສິກກໍ່ສິກ. ເລື່ອງສິກນີ້ລຸງຊຽງກູ່ຢາກສິກເອງ, ພໍ່ແມ່ເພິ່ນກໍ່ບໍ່ໄດ້ບອກ. ເປັນຫຍັງລຸງຊຽງກູ່ຈຶ່ງຢາກສິກ ເລື່ອງມັນເປັນແນວນີ້: ເວລານັ້ນແມ່ນປີ 1945 ຝ່າຍປະຕິວັດເຂົ້າຍຶດອຳນາດຈາກຍີ່ປຸ່ນ, ຂະບວນການລຸກຂຶ້ນຕໍ່ສູ້ຕ້ານກັບພວກລ່າເມືອງຂຶ້ນຟົດຟື້ນ, ໄປທາງໃດກໍ່ໄດ້ຍິນແຕ່ເຂົາເວົ້າເຖິງຂະບວນການ

---

117 ໝາກເກືອແມ່ນໝາກໄມ້ທຳມະຊາດ ໃຫຍ່ສໍ່າໝາກຂາມປ້ອມ ເປັນໜ່ວຍມົນ ເຮົາຕຳໃສ່ປູນມາແຊ່ໄວ້ ມັນດຳເພື່ອຍ້ອມຜ້າແພ.

ປະຕິວັດ, ເຮັດໃຫ້ລຸງຊຽງກູ່ ເກີດແນວຄິດຢາກໄປແລ້ວ, ຢາກໄປຕີສັດຕູ, ຕີຝຣັ່ງ. ແຕ່ເພິ່ນບໍ່ໄດ້ບອກຍາຄູວ່າ ຊິໄປເປັນທະຫານ. ຫຼັງຈາກສິກອອກມາລຸງຊຽງກູ່ກໍ່ໄປເລີຍໄປເຮັດການປະຕິວັດໂລດແລ້ວ.

ຊີວິດລຸງຊຽງກູ່ຢູ່ນຳພໍ່ນຳແມ່, ນຳຄອບຄົວ, ຄວາມຮັກ, ຄວາມແພງ ແລະ ຄວາມຊົງຈຳທີ່ວ່າພໍ່ແມ່ເພິ່ນສັ່ງສອນຫັ້ນແມ່ນຈື່ບໍ່ລືມ, ເພິ່ນຕິດໃຈທີ່ພໍ່ແມ່ເພິ່ນບອກວ່າ: ລູກເອີຍເຮັດຫຍັງກໍ່ເຮັດໃຫ້ມັນສຸດ, ຊຸດໃຫ້ມັນເຖິງ, ຖ້າເປັນທະຫານເຈົ້າກໍ່ເດັດຂາດເຮັດໃຫ້ມັນສຸດ, ບໍ່ລັງເລບໍ່ງຽງ, ບໍ່ທໍ້ຖອຍ, ພໍ່ເພິ່ນບອກແນວນັ້ນ. ດັ່ງນັ້ນລຸງຊຽງກູ່ຈຶ່ງປະຕິບັດຕາມພໍ່ເພິ່ນສອນ, ເພິ່ນປະຕິບັດຈົນເຖິງປະຈຸບັນ, ເພິ່ນເຊື່ອຄຳສັ່ງສອນຂອງພໍ່ແມ່ ແລະສາມອ້າຍນ້ອງເພິ່ນກໍ່ປະຕິບັດຕາມຄຳສັ່ງສອນຂອງພໍ່, ສາມອ້າຍນ້ອງພວກເພິ່ນ ໄປທະຫານອິດສະຫຼະໝົດ. ລຸງຊຽງກູ່ເປັນຜູ້ອອກໄປກ່ອນໝູ່ເພິ່ນໄປຢູ່ຄຳມ່ວນ. ອ້າຍລຸງຊຽງກູ່ອອກໄປເປັນຜູ້ທີ່ສອງວ່າຈະອອກໄປຢູ່ຫວຽດນາມ, ແຕ່ລາວພັດເປັນໄຂ້, ເລີຍລາວບໍ່ໄດ້ໄປນຳເຂົາ. ລາວໄດ້ບອກລຸງຊຽງກູ່ວ່າ: ເຈົ້າເປັນຜູ້ຊາຍເດີນ້ອງເອີຍ, ໃຫ້ເປັນຄົນຊາຍເດັດຂາດ, ເຮັດການປະຕິວັດແມ່ນເຮັດໃຫ້ມັນສຸດ. ກໍ່ຄືກັນກັບພໍ່ເພິ່ນບອກຫັ້ນແລ້ວເຮັດໃຫ້ມັນສຸດໃຫ້ມັນເຖິງ. ອ້າຍເພິ່ນບອກທໍ່ນັ້ນ, ເພິ່ນເອົາຄວາມເວົ້າຂອງພໍ່ມາສົມທົບກັບຄວາມເວົ້າຂອງອ້າຍ, ເພິ່ນຈຶ່ງໄດ້ຢູ່ຈົນເຖິງປະຈຸບັນ.

ຄວາມສົງສານ, ຄວາມຮັກ, ຄວາມແພງຕໍ່ກັບພໍ່ແມ່ນັ້ນລຸງຊຽງກູ່ມີຫຼາຍ ແຕ່ລຸງຊຽງກູ່ກໍ່ບໍ່ໄດ້ຢູ່ລ້ຽງດູພໍ່ແມ່ໃນເວລາທີ່ພໍ່ແມ່ເຖົ້າແກ່ ເພາະລຸງຊຽງກູ່ຄິດວ່າຖ້າຕົນເອງຢູ່ກັບພໍ່ແມ່ບໍ່ສາມາດສູ້ກັບພວກສັດຕູທີ່ມາປຸ້ນ, ມາຫາລຸນພໍ່ແມ່ ແລະ ຊາວບ້ານໄດ້. ເພາະວ່າເຂົາໄປປຸ້ນເຮືອນຊານຂອງຊາວບ້ານ, ເວລານັ້ນແມ່ນບັກສົບວນມັນມາປຸ້ນພໍ່ປຸ້ນແມ່ຂອງລຸງຊຽງກູ່, ມັນປຸ້ນເອົາງົວຄວາຍ, ເອົາຊັບສິນຂອງຊາວບ້ານໄປໝົດ. ລຸງຊຽງກູ່ເຫັນພາບເຫຼົ່ານີ້ເພິ່ນຈຶ່ງຄຽດແຄ້ນມັນ. ຖ້າຢູ່ກັບພໍ່ແມ່ນີ້ຈັກໜ້ອຍມັນມາບັງຄັບເພິ່ນ ຕ້ອງອອກໄປຫາທາງເພື່ອຈະມາແກ້ແຄ້ນຄືນ, ເພິ່ນຄິດແນວນັ້ນຈຶ່ງໄດ້ອອກໄປເຮັດການປະຕິວັດ. ຄວາມຮັກ

ຄວາມແພງນີ້ຮັກແພງທີ່ສຸດ, ແຕ່ລຸງຊຽງກູ່ໄດ້ຕັດສິນໃຈໄປເຮັດການປະຕິວັດ. ຫຼັງຈາກອອກໄປເຮັດການປະຕິວັດໄດ້ໄລຍະໜຶ່ງ ລຸງຊຽງກູ່ກໍ່ກັບມາບ້ານຢາມພໍ່ກັບແມ່, ພໍ່ແມ່ເຫັນລຸງຊຽງກູ່ ກັບມາເພິ່ນກໍດີອົກດີໃຈ, ເພິ່ນເຮັດຜູກແຂນໃຫ້ລຸງຊຽງກູ່, ແຕ່ເທື່ອນັ້ນກໍ່ເປັນເທື່ອສຸດທ້າຍທີ່ລຸງຊຽງກູ່ໄດ້ເຫັນໜ້າພໍ່ ແລະ ແມ່ຂອງເພິ່ນ, ຈາກນັ້ນລຸງຊຽງກູ່ກັບມາອີກເທື່ອທີສອງ, ພໍ່ແມ່ກໍ່ໄດ້ຈາກລູກໄປໝົດແລ້ວ ແລະລຸງຊຽງກູ່ກໍ່ບໍ່ເຫັນພໍ່ແມ່ໃນວາລະສຸດທ້າຍຂອງເພິ່ນ.

ເມື່ອລຸງຊຽງກູ່ຮູ້ຄວາມຄິດ ກໍ່ເຫັນຝຣັ່ງ ມັນຂົ່ມເຫັງ, ບີບບີ້ ພໍ່ແມ່ປະຊາຊົນຢູ່ໃນບ້ານ. ໃນແຕ່ລະປີ ລຸງຊຽງກູ່ເຫັນຝຣັ່ງມັນມາບັງຄັບໃຫ້ຜູ້ຊາຍໃນບ້ານຂອງເພິ່ນໄປເຮັດວຽກໃຫ້ພວກມັນ ຄືໄປເປັນກູລີ ແລະທະຫານ, ຜູ້ຊາຍໃນບ້ານຂອງລຸງຊຽງກູ່ ແຕ່ອາຍຸ 20 ປີຂຶ້ນໄປ ຕ້ອງໄປຮັບໃຊ້ຝຣັ່ງເປັນເວລາ 25 ມື້ ຕໍ່ປີ; ເມື່ອເຖິງລະດູການຜະລິດມາກໍ່ເຫັນແຕ່ເດັກນ້ອຍ ແລະ ຜູ້ຍິງເຮັດການຜະລິດເທົ່ານັ້ນ. ພ້ອມນີ້ຝຣັ່ງມັນຍັງມາເກັບເງິນ, ເຂົ້າແລະສັດລ້ຽງປະເພດຕ່າງໆນຳແຕ່ລະຄອບຄົວພໍ່ແມ່ປະຊາຊົນລາວ. ຖ້າຄອບຄົວໃດບໍ່ມີເງິນໃຫ້ຝຣັ່ງ ຜູ້ຊາຍໃນຄອບຄົວນັ້ນກໍ່ຕ້ອງໄປເປັນກູລີໃຫ້ຝຣັ່ງ. ທະຫານຝຣັ່ງມັນໄປປຸ້ນຄອບຄົວເຮືອນຊານຂອງຊາວບ້ານເລື້ອຍໆ. ຢູ່ໃກ້ບ້ານຂອງລຸງຊຽງກູ່ມີທະຫານກອງໃຫຍ່ຄືກອງສິບອນຢູ່ຜາຫ້ວຍ ໄປປຸ້ນບີບບັງຄັບເອົາເງິນເອົາຄຳນຳປະຊາຊົນ. ບາດນີ້ລຸງຊຽງກູ່ຄິດວ່າ ບ໋ະ! ຊິເຮັດແນວໃດຈຶ່ງຢຸດໄດ້ການກະທຳຂອງທະຫານຝຣັ່ງນີ້?, ພໍດີມື້ໜຶ່ງສວຍໂອກາດພວກນາຍບ້ານເຮັດໜັງສືມາເກນປະຊາຊົນໃນບ້ານ ລຸງຊຽງກູ່ໄປເປັນກູລີ[118], ເປັນທະຫານ ແລະເຮັດການ 15ວັນ. ເວລານັ້ນເປັນຍາມນ້ຳນອງເຕັມຝັ່ງ, ມີພວກຜູ້ສາວສອງຄົນຢູ່ຝັ່ງນັ້ນເອີ້ນໃສ່ລຸງຊຽງກູ່ວ່າ: “ອ້າຍໆ!” ລຸງຊຽງກູ່ຖາມເຂົາວ່າ: “ແມ່ນຫຍັງ?” ເຂົາຕອບລຸງຊຽງກູ່ວ່າ: “ບໍ່ມີຫຍັງ, ພວກນ້ອງມາສົ່ງໜັງສື”, ແລະພວກເຂົາບອກລຸງຊຽງກູ່ໄປເອົາໜັງສືນຳພວກເຂົາ, ພວກເຂົາຍື່ນໜັງສືໃຫ້ລຸງຊຽງກູ່ທັງ

---

118 ກູລີໝາຍຄວາມວ່າ ຄົນທີ່ຖືກເກນໄປເຮັດວຽກໃຫ້ຝຣັ່ງ ໂດຍບໍ່ມີຄ່າຕອບແທນ ໃນເວລານັ້ນ.

ບອກວ່າ: ພວກຂ້ອຍໄປກ່ອນເດີ້.ລຸງຊຽງກູ່ຈັບໜັງສືໃບນີ້ ແລະຄິດວ່າການເກນກູລີເທື່ອນີ້ບາງທີກໍ່ຖືກອ້າຍເພິ່ນ, ບາງທີກໍ່ຖືກພໍ່ເພິ່ນໄປເປັນກູລີແນ່ນອນ. ລຸງຊຽງກູ່ຊິທຳລາຍມັນ, ລຸງຊຽງກູ່ລົງອາບນ້ຳແລ້ວເພິ່ນກໍ່ເຮັດຕີລົ້ມ, ໜັງສືຕົກລົງນ້ຳ, ນ້ຳພັດໜັງສືໄປເລີຍ, ເຂົາໄປລາຍງານນາຍຝຣັ່ງວ່າ: ລຸງຊຽງກູ່ເປັນຜູ້ທຳລາຍໜັງສືທາງການຂອງນາຍບ້ານ, ນາຍບ້ານເອົາລຸງຊຽງກູ່ໄປໃສ່ຄຸກໄດ້ 6 ວັນ, ເຂົາຈຶ່ງປ່ອຍລຸງຊຽງກູ່ອອກ ແລະ ບອກລຸງຊຽງກູ່ວ່າ: "ກູສັ່ງສອນມຶງເນີ, ມຶງທຳລາຍຂອງເຈົ້າຂອງນາຍ". ລຸງຊຽງກູ່ຖືກໃສ່ຄຸກໃນເທື່ອນັ້ນ ແມ່ນໃນລະຫວ່າງປີ 1939-1940 ນີ້ລະ, ເວລານັ້ນ ລຸງຊຽງກູ່ມີອາຍຸໄດ້ 16 ປີ ເພາະເພິ່ນເກີດໃນປີ 1923 ແລະຍັງບໍ່ທັນສ້າງຄອບຄົວເທື່ອ. ຈາກນັ້ນລຸງຊຽງກູ່ຈຶ່ງຄິດວ່າເຮັດການປະຕິວັດນີ້ແລ້ວ ຈຶ່ງໄດ້ຂ້າມັນຈຶ່ງໄດ້ຕີກັບມັນຄືນ. ປະຊາຊົນລາວບໍ່ຍອມເປັນທິວເມືອງຂຶ້ນໃຫ້ຝຣັ່ງ, ປະຊາຊົນລາວຕ້ອງເປັນເຈົ້າຂອງປະເທດ ແລະ ປະເທດຊາດເຮົາຕ້ອງເປັນຂອງຄົນລາວ, ເຮົາຕ້ອງຕໍ່ສູ້ມັນຄືນ. ຈາກນັ້ນເພິ່ນກໍ່ເຂົ້າເຮັດການປະຕິວັດ, ເພິ່ນຈຶ່ໄດ້ວ່າປີທີ່ເພິ່ນເຂົ້າເຮັດການປະຕິວັດທຳອິດແມ່ນປີ 1945, ປີທີ່ຝາດສິດຍີ່ປຸ່ນຕີຝຣັ່ງນັ້ນລະ ເພິ່ນເຂົ້າເຮັດການປະຕິວັດ, ໜ້າທີ່ທຳອິດຂອງລຸງຊຽງກູ່ແມ່ນເປັນຕິດຕໍ່. ເວລານັ້ນ ເປັນປີທີ່ຝາດສິດຍີ່ປຸ່ນຕີກັບຝຣັ່ງ, ສ່ວນຝ່າຍປະຕິວັດນັ້ນມີຫວຽດນາມ, ມີລາວກໍ່ສວຍໂອກາດລຸກຮື້ຂຶ້ນຕໍ່ສູ້ເຊັ່ນກັນ. ພາຍຫຼັງຍີ່ປຸ່ນກຽມເມືອປະເທດ ພວກເຮົາກໍ່ຍຶດອຳນາດເລີຍໃນວັນທີ 12 ຕຸລາ ປີ 1945. ຈາກນັ້ນລຸງຊຽງກູ່ກໍ່ເຂົ້າເປັນທະຫານ ແລະ ເຄື່ອນໄຫວເຮັດວຽກເພື່ອປົກປ້ອງປະເທດຊາດເຮົາ. ປີ 1946 ຝຣັ່ງກໍ່ກັບຄືນມາຕີລາວອີກເປັນຄັ້ງທີສອງ. ພວກເຮົາເວລານັ້ນກໍ່ແບ່ງກຳລັງອອກເປັນຫຼາຍພາກສ່ວນ: ຜູ້ຂ້າມໄປທາງໄທກໍ່ມີ, ຜູ້ຂຶ້ນໄປທາງນາແປນາກາຍນີ້ກໍ່ມີ, ພວກໜຶ່ງກໍ່ຂຶ້ນໄປຕາມເສັ້ນທາງເລກ 9, ທັງໄປທັງຕີກັນ ແລະໄປຈົ້ງກັນຢູ່ເຊໂປນ. ເວລານັ້ນລຸງຊຽງກູ່ຢູ່ໃນຈຸຂອງບັກແຫຼ້, ຈຸຂອງພວກລຸງຊຽງກູ່ໄປຈົ້ງກັນກັບຝຣັ່ງຢູ່ລາວບ່າວ. ສຸດທ້າຍພວກລຸງຊຽງກູ່ກໍ່ໄດ້ໄປລີ້ໄປຢູ່ຫວຽດນາມຈົນເຖິງປີ 1947-1948 ພວກເພິ່ນຈຶ່ງຕິດຕໍ່ມາລາວໄດ້; ພວກເພິ່ນຕິດຕໍ່ມາທາງຟອງ

ຢາ, ທາງບົວລະພາ, ຈາກນັ້ນພວກລຸງຊຽງກູ່ກໍ່ກັບມາລາວ, ມາເຄື່ອນໄຫວຢູ່ບົວລະພານີ້ແລ້ວ, ພວກເພິ່ນກໍ່ເປີດກວ້າງການເຄື່ອນໄຫວອອກໄປ ເພື່ອປຸກລະດົມປະຊາຊົນຕໍ່ສູ້ກັບຝຣັ່ງ. ເວລານັ້ນອາວຸດຂອງພວກເພິ່ນກໍ່ຍັງບໍ່ທັນສະໄໝ, ມີແຕ່ປືນແກັບປືນເພີງທີ່ສູ້ກັບຝຣັ່ງເທົ່ານັ້ນ. ລຸງຊຽງກູ່ໄດ້ຕີກັບທະຫານຝຣັ່ງຫຼາຍຄັ້ງ, ຫຼາຍບັ້ນຮົບ ແຕ່ເພິ່ນບໍ່ຈື່ປີ ແລະ ບ່ອນແລ້ວ; ແຕ່ຄັ້ງທີ່ຕີຢູ່ທາງເລກ 9 ນີ້ ເປັນຄັ້ງໜຶ່ງທີ່ເພິ່ນຈື່ບໍ່ລືມໃນຊີວິດໃນການຕໍ່ສູ້ຕ້ານກັບຝຣັ່ງ. ແຕ່ນອກຈາກນັ້ນແມ່ນເພິ່ນບໍ່ຈື່.

ລຸງຊຽງຢູ່ກອງລາດຊະວົງ ເວລານັ້ນມີກອງທະຫານຂອງເພິ່ນ 4 ກອງ ເຂົາເອີ້ນວ່າ: ກອງລາດຊະວົງ,ກອງໄຊເສດຖາທິລາດ, ກອງເຈົ້າຟ້າງຸ່ມ ແລະ ກອງໄຊຈັກກະພັດ. ລຸງຊຽງກູ່ຂຶ້ນກັບກອງລາດຊະວົງ. ປີ 1948 ລຸງຊຽງກູ່ໄປຕໍາຊີ້ເຈຍຢູ່ຫວຽດນາມເພື່ອເຮັດມີ້ປືນແກັບປືນເພີງ. ປີ 1952 ລຸງຊຽງກູ່ໄປເຄື່ອນໄຫວຢູ່ມະຫາໄຊ,ເຂົາເອີ້ນວ່າກໍາເຂດຍ່ອຍເຂດ 112. ພວກລຸງຊຽງກູ່ທັງສູ້ຮົບທັງເຄື່ອນໄຫວໂຄສະນາປະຊາຊົນ, ປັບປຸງຮາກຖານປະຕິວັດແລະເຄື່ອນໄຫວຮາກຖານກັບອ້າຍນ້ອງຫວຽດນາມ. ລຸງຊຽງກູ່ຈື່ໄດ້ວ່າການເຄື່ອນໄຫວຢູ່ຮາກຖານ ປີ 1952 ມີຄັ້ງໜຶ່ງເພິ່ນຖືກສັດຕູສະກັດ. ເພິ່ນຖືກຢູ່ໃນວົງສະກັດຂອງສັດຕູຍ້ອນວ່າ: ທາງກອງບັນຊາການຂອງແຂວງສັ່ງໃຫ້ເພິ່ນໄປຕິດຕໍ່ກັບອ້າຍນ້ອງເພື່ອນບ້ານ, ໄປສົ່ງໜັງສືໃຫ້ອ້າຍນ້ອງຫວຽດນາມຢູ່ຕີນພູຊ້າງແຫ່. ລຸງຊຽງກູ່ໄດ້ສົ່ງໜັງສືໃຫ້ອ້າຍນ້ອງຫວຽດນາມແລ້ວກໍ່ກັບມາ, ເມື່ອກັບຄືນມາຮອດເຂດບ້ານທົ່ງນາຄໍາຈວງ,ບ້ານນາກາງ ແລະ ບ້ານນາແກ້ງແມວ ພໍດີເພິ່ນຖືກວົງສະກັດຂອງສັດຕູໜຶ່ງກອງຮ້ອຍ. ບາດນີ້ເພິ່ນມີແຕ່ຜູ້ດຽວ, ພວກມັນຍິງອ້ອມເພິ່ນ, ພວກມັນມີປືນຈັກ 3 ກະບອກຍິງສຸມໃສ່ລຸງຊຽງກູ່, ເພາະລຸງຊຽງກູ່ໄດ້ຍິນສຽງປືນມາຈາກສາມທິດ. ຕົ້ນໄມ້ທີ່ຢູ່ອ້ອມຂ້າງເພິ່ນນັ້ນມຸ່ນໝົດບໍ່ມີຫຍັງເລີຍ. ເວລານັ້ນລຸງຊຽງກູ່ບໍ່ຮູ້ຍ້ານຫຍັງເລີຍ, ເພິ່ນຄິດຊິໄປທາງໃດບາດນີ້ທາງນີ້ກໍ່ເປັນທົ່ງນາ, ທາງນັ້ນກໍ່ແມ່ນບ່ອນພວກສັດຕູສະກັດໃກ້ຢູ່. ແນວໃດກໍ່ແນວລຸງຊຽງກູ່ຕັດສິນໃຈແລ່ນຜ່ານແຖວສັດຕູ, ເພິ່ນແລ່ນເຂົ້າໄປໃນວົງສະກັດ

ຂອງພວກມັນ, ພວກມັນຍິງ. ສຸດທ້າຍລຸງຊຽງກູ່ວິດວິງສະກັດ, ເພິ່ນແລ່ນໄວທີ່ສຸດເທົ່າທີ່ຈະໄວໄດ້, ແລ່ນອອກຈາກພວກມັນແລ້ວຂຶ້ນໄປໃນປ່າເລີຍ ແລະ ເພິ່ນກໍ່ຫວິດວິງສະກັດຂອງສັດຕູ.

ມາໃນປີ 1953, ລຸງຊຽງກູ່ເຄື່ອນໄຫວຢູ່ເຂດຍ່ອຍມີໜ້າທີ່ທັງເຄື່ອນໄຫວສູ້ຮົບ ແລະຂົນຂວາຍປະຊາຊົນຢູ່ເຂດມະຫາໄຊ, ເຂດບ້ານແກ້ງແມວ. ມື້ໜຶ່ງລຸງຊຽງກູ່ກັບຈາກການຂົນຂວາຍປະຊາຊົນຢູ່ເຂດມະຫາໄຊ, ບົນເສັ້ນທາງກັບບ້ານ, ລຸງຊຽງກູ່ຖືກຝຣັ່ງຈັບໄດ້ເພາະຖືກມັນລັດສະກັດ. ມັນເອົາປືນຈີ້ໜ້າຜາກລຸງຊຽງກູ່, ມັດແຂນລຸງຊຽງກູ່ໄຂ່ວຫຼັງ ແລະ ທັງຈົ່ມດ່າເປັນບັກຄອມມູຍນິດ. ພວກມັນເອົາລຸງຊຽງກູ່ມາຂັງຢູ່ຄຸກທ່າໄຂ່ງເປັນເວລາ 16 ມື້. ເວລາຢູ່ໃນຄຸກລຸງຊຽງກູ່ຖືກຝຣັ່ງທໍລະມານ. ຢູ່ໃນປົດທ່າໄຂ່ງນີ້ມີທະຫານຝຣັ່ງຊຶ່ງເປັນຄົນຫວຽດນາມໃຕ້ມີຊື່ວ່າ ບັກຊິກລຸກ, ມັນເປັນໄມ້ມືຂອງຝຣັ່ງຄົນໜຶ່ງທີ່ໄດ້ຊື່ວ່າຕີຄອມມູຍນິດເກັ່ງທີ່ສຸດ, ທໍລະມານກອມມຸຍນິດເກັ່ງທີ່ສຸດ. ໃນປົດທ່າໄຂ່ງນັ້ນ, ມັນເອົາລຸງຊຽງກູ່ໄປສອບສວນໃນຫ້ອງການຂອງມັນຢູ່ຂຸມດິນ, ຂຸມດິນຂຸມໃດກໍ່ເລິກພຽງຫົວ, ຢູ່ຫ້ອງການຂອງມັນເປັນເຮືອນຝຣັ່ງຢູ່, ມີໂຕະໃຫຍ່ 3 ໂຕະ, ມັນເອົາທຸງຜືນໜຶ່ງມາປູໂຕະທັງຊີ້ມືໃສ່ທຸງ ແລະ ທັງເວົ້າເປັ່ງສຽງຢ່າງແຮງອອກມາໃສ່ລຸງຊຽງກູ່, ແຕ່ລຸງຊຽງກູ່ບໍ່ຮູ້ວ່າມັນກຳລັງເວົ້າຫຍັງຢູ່, ລຸງຊຽງກູ່ຄິດວ່າມັນຕ້ອງເວົ້າວ່າ: "ແມ່ນທຸງຂອງໃຜນີ້?" ເພິ່ນເລີຍຕອບມັນວ່າ: "ນີ້ແມ່ນທຸງຊາດລາວ". ມັນມີປືນບອກໜຶ່ງປະຈຳຢູ່ໂຕະຂອງມັນ. ທະຫານຂອງພວກມັນ 4 ຄົນ ປ້ອງກັນບໍ່ໃຫ້ລຸງຊຽງກູ່ໜີ ແລະ ມີຄົນລາວຜູ້ໜຶ່ງເປັນຜູ້ແປພາສາໃຫ້ລຸງຊຽງກູ່, ມັນເວົ້າວ່າ: ມຶງເວົ້າດີໆເນີ, ຄັນມຶງເວົ້າບໍ່ດີແມ່ນມຶງຕາຍ. ແລ້ວມັນຖາມລຸງຊຽງກູ່: ດຽວນີ້ກົມກອງຂອງມຶງຢູ່ໃສ? ລຸງຊຽງກູ່ເລີຍຕອບມັນວ່າ: ຖາມກູເຮັດຫຍັງ, ພວກມຶງຈັບກູຢູ່ໃສກົມກອງກູກໍ່ຢູ່ທີ່ນັ້ນລະ. ມັນຖິ້ມໄມ້ບັນທັດເຫຼັກລົງພື້ນ ແລ້ວເປັ່ງສຽງຮ້າຍຢ່າງແຮງໃສ່ລຸງຊຽງກູ່: ເອົາ! ມຶງຄຸເຂົ່າໃສ່ໄມ້ຕາຄັດເຫຼັກຫັ້ນ, ແລ້ວເວົ້າໃຫ້ດີ, ມຶງເວົ້າບໍ່ດີມຶງຕາຍມື້ນີ້. ເວລານັ້ນລຸງຊຽງກູ່ເຮັດຄຸເຂົ່າລົງ, ຄຸລົງໜ້ອຍໜຶ່ງເຈັບຈົນຊິຕາຍ. ມັນແຂກໃສ່ລຸງຊຽງກູ່ອີກ: ແກ້

ເສື້ອຖິ້ມ! ໄມ້ແສ້ມັນຟາດໃສ່ຫຼັງລຸງຊຽງກູ່ໂລດ, ລຸງຊຽງກູ່ແກ້ເສື້ອເບິ່ງເອີກໃສ່ມັນ: ມຶງບໍ່ຕ້ອງຊູ່. ມັນເອົາທະຫານມາຕື່ມອີກ 2 ຄົນ ເປັນ 6 ຄົນ ເພື່ອປ້ອງກັນລຸງຊຽງກູ່. ມັນຈັບຄໍເສື້ອເພິ່ນ, ປືນສັ້ນມັນຈີ້ຈໍ່າຂະໝັບລຸງຊຽງກູ່, ມັນກັດແຂ້ວກິດໆກາດໆ. ຈາກນັ້ນມັນກໍ່ຍ່າງໄປຟາກໂຕະເບື້ອງກົງກັນຂ້າມກັບລຸງຊຽງກູ່ແລ້ວເວົ້າວ່າ: ກູກໍ່ບໍ່ຮູ້ຈັກ, ແຕ່ເວລາກູຈັບປືນໄດ້ກູກໍ່ຈັບປືນຫາຍິງຝຣັ່ງ. ມັນຖາມອີກວ່າ: ແລ້ວມຶງໄປຮອດໃສ? ຫວຽດນາມມຶງກໍ່ໄປບໍ? ລຸງຊຽງກູ່ຕອບມັນວ່າ: ໄປ, ໄປທົ່ວໝົດ. ມັນເວົ້າອີກ, ເມືອງໃດ? ລຸງຊຽງກູ່ຕອບມັນວ່າ: ເມືອງໃດບໍ່ຮູ້ຈັກ,ເມືອງຫວຽດນາມໄປໝົດ. ມັນວ່າ: ມຶງຮູ້ຈັກບໍຄວາມຫວຽດນາມ? ລຸງຊຽງກູ່ຕອບມັນໄປວ່າ: ຄວາມບໍ່ຮູ້ຈັກແຕ່ເຂົາເວົ້ານີ້ຮູ້ຈັກ. ມັນບອກລຸງຊຽງກູ່ວ່າ: ມຶງເວົ້າເບິ່ງ! ລຸງຊຽງກູ່ຕອບມັນວ່າ: ເວົ້າບໍ່ໄດ້ຄັນເວົ້າຄືລາວໄດ້, ລາວເວົ້າກໍ່ຮູ້ຈັກ, ຫວຽດເວົ້າກໍ່ຮູ້ຈັກ. ລຸງຊຽງກູ່ກໍ່ເວົ້າພາສາຫວຽດນາມຕາມມັນສັ່ງ ແລະ ເວົ້າໄປທົ່ວທິບ, ມັນຟັງໄດ້ແດ່ບໍ່ໄດ້ແດ່; ລຸງຊຽງກູ່ເວົ້າໄປເວົ້າມາ. ມັນບໍ່ມີບ່ອນເອົາ, ບໍ່ໄດ້ກົກໄດ້ປາຍສຸດທ້າຍມັນຍອມ. ບາດນີ້ ມັນຊິທາລຸນລຸງຊຽງກູ່, ມັນເອົາຄືນເຄົ້າບັກໃຫຍ່ມາໜີບຄໍ ແລະ ໜີບທ້ອງລຸງຊຽງກູ່, ໂຢ້! ມັນເຈັບ, ທາງນີ້ເຫຼືອຕາຍ, ຕີນລຸງຊຽງກູ່ຢັນໂຕະໃຫຍ່ເລີຍບາດນີ້, ໂຕະໃຫຍ່ລົ້ມທັບບັກຫວຽດນາມໃຕ້ນັ້ນໂລດ, ມັນກໍ່ລົ້ມໄປພຸ້ນ, ລຸງຊຽງກູ່ກໍ່ລົ້ມມາພີ້, ມັນກໍ່ບັດໄປຫຼາຍເຕີບ, ມັນລຸກຂຶ້ນມາແລ້ວຍ່າງຂຶ້ນໄປຫາບັກຝຣັ່ງ, ພວກມັນເວົ້າໃສ່ກັນເປັນພາສາຝຣັ່ງຈັກມັນເວົ້າອີ່ຫຍັງກໍ່ບໍ່ຮູ້ຈັກ, ມີທະຫານສາມສີ່ຄົນຍ່າງລົງມາ, ມັນເຕະສຽບໃສ່ທ້ອງລຸງຊຽງກູ່; ມັນເວົ້າຢ່າງແຮງວ່າ: ເອົາໄປເຂົ້າຄຸກ, ມື້ອື່ນຊິເອົາໄປຂ້າ, ຂ້າຖິ້ມແລ້ວມື້ອື່ນ. ຈາກນັ້ນພວກມັນກໍ່ເອົາລຸງຊຽງກູ່ໄປຂັງໄວ້ໃນຄຸກຂອງປິດທ່າໂຂ່ງໃນຄືນມື້ນັ້ນ, ຕື່ນມື້ເຊົ້າມາມັນສົ່ງລຸງຊຽງກູ່ໄປສະຫວັນນະເຂດ. ຮອດສະຫວັນນະເຂດລຸງຊຽງກູ່ກໍ່ເຫັນໝູ່ເຫັນເພື່ອນສະຫາຍຂອງເພິ່ນຢູ່ຫັ້ນຫຼາຍຄົນ, ຄືກັບວ່າລຸງຊຽງກູ່ພົບກັບຍາດພີ່ນ້ອງທີ່ໃກ້ຊິດທີ່ສຸດຂອງຕົນເຮັດໃຫ້ລຸງຊຽງກູ່ມີຄວາມຫວັງ ແລະ ກຳລັງໃຈເພີ່ມອີກຫຼາຍເທົ່າ. ພວກເຂົາໄດ້ຖາມຫາສະພາບການຂອງລຸງຊຽງກູ່ທີ່ຖືກທາລຸນຢູ່ໃນຄຸກປິດທ່າ

ໂຂ່ງ, ລຸງຊຽງກູ່ໄດ້ເລົ່າສູ່ພວກເຂົາຟັງເຫດການຕ່າງໆ ທີ່ເກີດຂຶ້ນກັບລຸງຊຽງກູ່ຢູ່ປົດທ່າໂຂ່ງ.

ຢູ່ຄຸກສະຫວັນນະເຂດ, ພວກມັນມາເອົາລຸງຊຽງກູ່ໄປສອບສວນອີກ ແລະ ຖາມແບບຄຳຖາມເດີມໆທີ່ພວກມັນຖາມເພິ່ນຢູ່ຄຸກປົດທ່າໂຂ່ງນັ້ນ. ລຸງຊຽງກູ່ກໍ່ຕອບພວກມັນຄືເກົ່າ, ພວກມັນກໍ່ທາລຸນເພິ່ນອີກໂດຍປ່ຽນວິທີທາລຸນໃໝ່ຄືເອົາໄຟຟ້າມາຈັບ. ຫຼັງຈາກຖືກໄຟຟ້າຈັບລຸງຊຽງກູ່ກໍ່ສະຫຼົບໄປ, ເມື່ອເພິ່ນຮູ້ສຶກຂຶ້ນມາພວກມັນຖາມເພິ່ນອີກ ແລະ ກໍ່ເປັນຄຳຖາມເດີມໆ, ເພິ່ນກໍ່ຕອບພວກມັນຄືເກົ່າ, ມັນເອົາໄຟຟ້າຈັບອີກ, ລຸງຊຽງກູ່ສະຫຼົບໄປຫຼາຍເທື່ອ, ແຕ່ຄືນມາເພິ່ນຕັ້ງໃຈໃໝ່, ເດັດຂາດບໍ່ເວົ້າຫຍັງ. ມັນຖາມຫຍັງຄືເກົ່າ, ຖາມບໍ່ໄດ້ເລື່ອງໄດ້ລາວ, ມັນເອົາລຸງຊຽງກູ່ຂຶ້ນຫ້ອງການຂອງພວກຝຣັ່ງ. ຢູ່ໃນຫ້ອງການໃຫຍ່ມີບັກກັບປີແຕນ, ມັນບໍ່ໄດ້ເວົ້າຫຍັງ, ເລີຍສັ່ງໃຫ້ບັກຫວຽດຜູກແຂນສອກລຸງຊຽງກູ່ຢູ່ໃນຫ້ອງການຫັ້ນໂລດ. ມັນດຶງເຊືອກ, ມັນເຕະທ້ອງລຸງຊຽງກູ່ 7 ບາດ, ເກີບມັນກໍ່ແມ່ນເກີບໜັງ. ຈາກນັ້ນມັນຢາກຈະສັບຂະໝັບຫູລຸງຊຽງກູ່ແຕ່ເພິ່ນເອົາດັງຮັບ, ເລືອດດັງເພິ່ນອອກຖ້ວມເຕັມໜິດໜ້າເອີກ, ເພິ່ນຊິກເລືອດອອກອີກເຕັມພື້ນເຮືອນຫ້ອງການພວກມັນ, ມັນເອົານ້ຳເຕົ້ານ້ຳແກ້ວມາທິດທົວລຸງຊຽງກູ່, ທິດແລ້ວເລືອດກໍ່ຢຸດ, ແລ້ວເວົ້າໃສ່ບັກທະຫານຍາມວ່າ: ເອົາມັນເມືອ, ມື້ອື່ນເອົາໄປຂ້າຖິ້ມໂລດ. ຈາກນັ້ນມັນກໍ່ຍ່າງໜີ. ພວກທະຫານລາວທີ່ເປັນຕີນມືໃຫ້ຝຣັ່ງກໍ່ຄຸມຕົວລຸງຊຽງກູ່ກັບເຂົ້າຄຸກ, ບົນເສັ້ນທາງກັບຄຸກລຸງຊຽງກູ່ກໍ່ດ່າພວກທະຫານນັ້ນວ່າ: ໝູ່ເຈົ້າເຫັນບໍວ່າເລືອດໃຜນີ້, ແມ່ນເລືອດລາວບໍ? ນີ້ຝຣັ່ງມັນທາລຸນຄົນລາວ, ພວກເຈົ້າເປັນຂ້ອຍຂ້າມັນ, ເຂົາທຳລາຍລາວ, ມຶນຕາຄືໝານີ້.

ບົນທາງກັບມາໃນຄຸກ ລຸງຊຽງກູ່ກໍ່ດ່າພວກມັນໄປນຳ, ປືນມັນຈີ້ກໍ່ຈີ້ໄປ. ຈາກນັ້ນພວກມັນເອົາລຸງຊຽງກູ່ໄປໃສ່ຄຸກສຸລິນ. ຢູ່ໃນຄຸກສຸລິນ ມີຄຸກພິເສດສຳລັບຜູ້ທີ່ມັນວ່າເປັນນັກຄອມມຸຍນິດທົວແຂງ, ຄຸກພິເສດນີ້ພໍຫຼີມຕົວຂອງຊຽງກູ່, ນັ່ງກໍ່ນັ່ງໄດ້ໂກ້ງໂກະເທົ່ານັ້ນ. ພວກມັນຂັງລຸງຊຽງກູ່ຢູ່ຄຸກນ້ອຍ, ຄຸກນ້ອຍນີ້

ເຂົາເອີ້ນວ່າຄຸກສຸລິນ. ຕອນກາງຄືນມາຄົນເຮົາທີ່ເປັນໃກ້ຊິດຢູ່ຫັ້ນ ເຂົາກໍ່ປ່ອຍລຸງຊຽງກູ່ອອກມາຢູ່ນຳຜູ້ອື່ນໆ, ເຖິງຕອນເຊົ້າລຸງຊຽງກູ່ເຂົ້າໄປຢູ່ໃນຄຸກນ້ອຍນັ້ນອີກ, ຕອນແລງເຂົາກໍ່ປ່ອຍລຸງຊຽງກູ່ອອກຢູ່ນຳໝູ່.ພາຍຫຼັງມັນຫາລຸນລຸງຊຽງກູ່ໄດ້ 3 ມື້ ມັນມາຖ່າຍເອົາຮູບ, ແຕ່ດັງຂອງລຸງຊຽງກູ່ບໍ່ຄືເກົ່າອີກແລ້ວ, ໃບໜ້າຂອງລຸງຊຽງກູ່ໄດ້ປ່ຽນໄປ, ດັງໃຫຍ່, ໃບໜ້າກໍ່ໃຫຍ່ເພາະໃບໜ້າໄດ້ໄຄ່ຂຶ້ນ. ມັນຖ່າຍຮູບແລ້ວ ມັນກໍ່ເອົາຮູບຂອງລຸງຊຽງກູ່ນັ້ນໄປຕິດຢູ່ຕາມແຕ່ລະຫ້ອງການແລະມັນຂຽນໃສ່ຮູບຂອງລຸງຊຽງກູ່ວ່າ: ນັກໂທດຄອມມຸຍນິດຫົວແຂງ. ລຸງຊຽງກູ່ບໍ່ຍອມພວກມັນເຖິງວ່າພວກມັນຊິຂ້າເພິ່ນກໍ່ຕາມ, ແຕ່ລຸງຊຽງກູ່ຍັງຄິດວ່າພວກມັນຂັງລຸງຊຽງກູ່ຢູ່ຄຸກສະຫວັນນະເຂດນີ້ໄດ້ 2 ເດືອນ. ຈາກນັ້ນອ້າຍນ້ອງເຮົາຕີທ່າແຂກແຕກຊິ່ວຄາວ, ພວກມັນກະວົນກະວາຍ. ພວກມັນຈັດສົ່ງລຸງຊຽງກູ່ຊຶ່ງເປັນຄົນລາວຄົນດຽວໄປກັບອ້າຍນ້ອງຫວຽດນາມ 30 ຄົນຂຶ້ນຍົນຢູ່ເຊໂນ, ໄປລົງຢູ່ເມືອງຕຸມລານ, ໄປເຂົ້າຄຸກຢູ່ຕຸ່ມລານ. ຢູ່ຄຸກຕຸມລານພວກລຸງຊຽງກູ່ເລີ່ມມີການເຄື່ອນໄຫວປຸກລະດົມອ້າຍນ້ອງຢູ່ໃນຄຸກນຳກັນຕໍ່ສູ້ຂ້າຝຣັ່ງ. ພວກມັນເອົາພວກລຸງຊຽງກູ່ ຊຶ່ງພວກມັນເອີ້ນວ່າເປັນນັກໂທດຄອມມຸຍນິດໄປເຕົ້າໂຮມຢູ່ຄຸກຕຸມລານໝົດ, ບັນດານັກປະຕິວັດທີ່ຖືກພວກມັນຈັບນີ້ມີຮອດນາຍພົນ, ນາຍພັນ ແລະນັກຮົບທີ່ຖືກຈັບມາພ້ອມກັນ. ດັ່ງນັ້ນ ພວກລຸງຊຽງກູ່ ຈຶ່ງມີການປຸກລະດົມເຄື່ອນໄຫວການຕໍ່ສູ້ຢູ່ໃນຄຸກໂດຍຕະຫຼອດ.

ນອກຈາກພວກລຸງຊຽງກູ່ ຊຶ່ງເປັນພາກສ່ວນທະຫານທີ່ມາຈາກຄຸກສະຫວັນນະເຂດແລ້ວ ຍັງມີນັກໂທດປະຊາຊົນຖືກທີ່ຂັງຢູ່ໃນຄຸກຕຸມລານອີກດ້ວຍ. ໃນນີ້ມີປະຊາຊົນຜູ້ເຖົ້າອາຍຸ 70-80 ປີ, ຜູ້ຍິງກຳລັງຖືພາກໍ່ຖືກຈັບມາຂັງຢູ່ໃນຄຸກນີ້ເຊັ່ນດຽວກັນ ແລະ ຜູ້ຍິງເກີດລູກຢູ່ໃນຄຸກກໍ່ມີ. ເມື່ອເບິ່ງສະພາບດັ່ງກ່າວແລ້ວແມ່ນທໍລະມານຈິດໃຈຂອງລຸງຊຽງກູ່ທີ່ສຸດ. ຈາກສະພາບດັ່ງກ່າວໄດ້ເຮັດໃຫ້ຄວາມຄຽດແຄ້ນຂອງພວກລຸງຊຽງກູ່ຍິ່ງເພີ່ມທະວີຂຶ້ນຕື່ມຫຼາຍເທົ່າ. ຫຼັງຈາກນັ້ນພວກລຸງຊຽງກູ່ກໍ່ປຶກສາຫາລື ແລະ ຊົນຂວາຍເອົາທະຫານຂອງພວກມັນປະມານ 30 ປາຍຄົນເພື່ອເຂົ້າຮ່ວມກັບພວກລຸງຊຽງກູ່ເຮັດການປະຕິວັດ, ຂະ

ຫຍາຍຂະບວນການຕໍ່ສູ້ຕ້ານຝຣັ່ງເພື່ອປົດປ່ອຍປະຊາຊົນ ແລະ ປະເທດຊາດຂອງພວກເຮົາ.

ຝຣັ່ງເອົາພວກລຸງຊຽງກູ່ ແລະ ປະຊາຊົນໄປເຮັດວຽກເປັນກູລີໃຫ້ມັນ. ຄວາມລຳບາກໃນການເປັນກູລີໃຫ້ຝຣັ່ງແມ່ນເອົາຫຍັງມາປຽບບໍ່ໄດ້ເລີຍ. ກ່ອນຈະອອກໄປເຮັດວຽກບາງພວກລຸງຊຽງກູ່ທີ່ກໍ່ບໍ່ໄດ້ກິນຮອດເຂົ້າ, ແຕ່ເມື່ອພວກເພິ່ນໄປເຮັດວຽກແລ້ວ ພັດເຮັດກາຍໂມງ ຈົນເຖິງ 13:00-14:00 ໂມງຕອນແລງພວກເພິ່ນກໍ່ບໍ່ໄດ້ກິນເຂົ້າ, ພວກເພິ່ນທັງອິດເມື່ອຍ ແລະຫິວເຂົ້າ ກໍ່ພໍສໍ່ານັ້ນ. ພວກເພິ່ນເຮັດວຽກກໍ່ໜັກ, ມັນຖິ້ມລູກຫະນູໃສ່, ໂຍນກ້ອນຫີນມາໃສ່, ໃຜຮັບທັນກໍ່ທັນບໍ່ທັນກໍ່ເຈັບ, ມີບາງຄົນຂາຫັກແຂນຫັກກໍ່ມີ. ເຫັນສະພາບດັ່ງກ່າວພວກລຸງຊຽງກູ່ມາປຶກສາກັນໃໝ່, ຊອກຫາຊ່ອງທາງເພື່ອຢັບຢັ້ງການບັງຄັບທາລຸນປະຊາຊົນ ແລະພວກລຸງຊຽງກູ່ ຜູ້ທີ່ຢູ່ໃນຄຸກແບບນີ້ໂດຍມີຂໍ້ສະເໜີໃຫ້ພວກຝຣັ່ງວ່າ: "ກ່ອນຈະໃຫ້ພວກຂ້ອຍ ແລະປະຊາຊົນອອກໄປເຮັດວຽກໃຫ້ພວກນັ້ນ ກໍ່ຕ້ອງໃຫ້ພວກຂ້ອຍໄດ້ກິນເຂົ້າກ່ອນ ຫຼື ໃຫ້ພວກຂ້ອຍໄດ້ກິນເຂົ້າຈີ່ຜູ້ລະກ້ອນ, ຄັນບໍ່ດັ່ງນັ້ນ ພວກຂ້ອຍເຮັດວຽກບໍ່ໄດ້ເພາະພວກຂ້ອຍເມື່ອຍ". ການຕໍ່ສູ້ຂອງພວກລຸງຊຽງກູ່ໄດ້ຮັບຜົນ. ບາດສຸດທ້າຍ ມັນກໍ່ເອົາເຂົ້າຈີ່ມາແຈກໃຫ້ພວກລຸງຊຽງກູ່ ແລະ ປະຊາຊົນທີ່ຖືກຄຸກດ້ວຍກັນຜູ້ລະກ້ອນ. ຕໍ່ມາຈາກການເຄື່ອນໄຫວໃນຄຸກຂອງພວກລຸງຊຽງກູ່ກໍ່ຍິ່ງເຂັ້ມແຂງຂຶ້ນເລື້ອຍໆ; ພວກລຸງຊຽງກູ່ກໍ່ເລີ່ມຈັດຕັ້ງການເຄື່ອນໄຫວ ໃນໝູ່ປະຊາຊົນທີ່ຢູ່ໃນຄຸກນຳກັນ. ພວກລຸງຊຽງກູ່ຄ່ອຍອະທິບາຍໃຫ້ພວກເຂົາເຂົ້າໃຈ ກ່ຽວກັບສາເຫດຂອງການເຮັດການປະຕິວັດຕ້ານຝຣັ່ງ. ຈາກນັ້ນພວກເຂົາກໍ່ເຂົ້າຮ່ວມກັບລຸງຊຽງກູ່ ໃນການຕໍ່ສູ້ຕ້ານຝຣັ່ງຢູ່ໃນຄຸກນີ້ ແລະເບິ່ງສະພາບຕົວຈິງຖ້າມັນຮ້າຍພວກລຸງຊຽງກູ່ຕ້ອງຂ້າໂລດ, ພວກເພິ່ນຈັດຕັ້ງກັນຄັກແນ່. ຕໍ່ມາອາຫານການກິນແຕ່ລະມື້ຢູ່ໃນຄຸກທີ່ຝຣັ່ງມາສົ່ງໃຫ້ພວກເພິ່ນນັ້ນຍິ່ງຫຼຸດລົງ; ບາງທີ 2-3 ມື້ ຈຶ່ງໄດ້ອາຫານມາກິນ, ພວກລຸງຊຽງກູ່ເລີຍປະທ້ວງມັນວ່າ: ພວກເຮົາຢູ່ຄຸກສະຫວັນນະເຂດ, ກິນເຂົ້າຈີ່ຜູ້ໜຶ່ງກ້ອນໜຶ່ງກັບປ່ອງປາ 2 ປ່ອງຕໍ່ມື້ ແລະ ຍັງມີນ້ຳກິນນຳ

ອີກ. ມັນຕອບພວກເຮົາວ່າ: ບໍ່ໄດ້, ຢູ່ນີ້ບໍ່ມີ. ເຖິງວ່າມັນບອກບໍ່ມີພວກລຸງຊຽງກູ່ກໍ່ສູ້ໄປ ແລະ ກໍ່ນັດຢຸດເຮັດວຽກເພາະພວກລຸງຊຽງກູ່ບໍ່ມີແຮງຈະເຮັດວຽກຕໍ່ໄປອີກ. ຕໍ່ມາມັນຮ້າຍ, ມັນຈັບຄໍເສື້ອຕົບຫູສະຫາຍຂອງພວກລຸງຊຽງກູ່ຄົນໜຶ່ງ, ພວກລຸງຊຽງກູ່ກໍ່ແລ່ນຫຸ້ມໃສ່ມັນໂລດ, ຫຸ້ມແລ້ວກໍ່ບໍ່ໄດ້ເວົ້າຫຍັງເລີຍເອົາມີດປາດຄໍໂລດ. ພວກເພິ່ນເລືອດທະຫານຝຣັ່ງດໍາມັນໄຫຼອອກມາ, ພວກລຸງຊຽງກູ່ກໍ່ບໍ່ໜີພວກເພິ່ນຢູ່ທີ່ນັ້ນເລີຍ. ຝຣັ່ງດໍາທັງໝົດສຸມມາໃສ່ພວກລຸງຊຽງກູ່. ພວກລຸງຊຽງກູ່ເວົ້າໃຫ້ພວກມັນວ່າ: "ພວກເຈົ້າກໍ່ເປັນຂ້ອຍພວກຝຣັ່ງຂາວເຊັ່ນກັນ, ແຕ່ເປັນຫຍັງພວກເຈົ້າທໍາຮ້າຍພວກຂ້ອຍ". ພໍດີເວົ້າແນວນີ້ແລ້ວພວກມັນກໍ່ເອົາພວກລຸງຊຽງກູ່ຍັດໃສ່ລົດກັບເມືອໃສ່ຄຸກ, ອັດປະຕູຄຸກຕຶງຢ່າງແຮງ ຫຼັງຈາກນັ້ນພວກລຸງຊຽງກູ່ ໄດ້ 3 ມື້ມັນຈຶ່ງມາໄຂປະຕູຄຸກ; ມັນເອົາທະຫານກອງພັນໜຶ່ງມາຄຸ້ມຄອງ ແລ້ວເອີ້ນພວກລຸງຊຽງກູ່ໄປລຽນແຖວເປັນ 3 ແຖວໃນຈໍານວນ 30 ຄົນ, ມັນມອບປືນໃຫ້ແຖວລະກະບອກ, 3 ແຖວ 3 ກະບອກ. ມັນເວົ້າວ່າ: ມື້ນີ້ແມ່ນມື້ພວກເຈົ້າຕາຍ! ເວລານັ້ນພວກລຸງຊຽງກູ່ຄິດວ່າຢ່າມັນ, ຕາຍກໍ່ຕາຍ, ຕາຍເພື່ອປະຊາຊົນ; ມັນຖາມວ່າ: ແມ່ນໃຜຂ້າຝຣັ່ງ, ຂ້ານັກສືບແດງຫັ້ນ? ພວກລຸງຊຽງກູ່ຍໍມືໝົດທຸກຄົນພ້ອມດຽວກັນ ແລະ ເວົ້າກັບມັນວ່າ: "ພວກເຈົ້າເຫັນພວກຂ້ອຍຈັບພວກເຈົ້າບໍ່, ພວກເຈົ້າຫາລຸນພວກຂ້ອຍກ່ຽວກັບການກິນຢູ່, ພວກເຈົ້າບໍ່ໃຫ້ພວກຂ້ອຍໄດ້ກິນອິ່ມ, ແຕ່ພວກເຈົ້າພັດໃຫ້ພວກຂ້ອຍເຮັດວຽກຈົນບໍ່ມີເວລາພັກຜ່ອນ, ພວກຂ້ອຍນີ້ທໍລະມານໂຮ່ຈົນມຶນເພື່ອປະຊາຊົນ, ຕາຍກໍ່ບໍ່ຢ້ານ". ມັນແກ່ວງຫົວແລ້ວກໍ່ຖອຍເມືອເລີຍ. ຖອຍເມືອໄດ້ 3 ວັນ, ມັນເອົາລົດມາຂົນພວກລຸງຊຽງກູ່ໄປຂັງຢູ່ກໍາແຮ້ງປະເທດຫວຽດນາມ. ມັນສົ່ງພວກລຸງຊຽງກູ່ໄປໝົດ ເພາະມັນຢ້ານພວກລຸງຊຽງກູ່ຈະກໍ່ເຫດຂ້າມັນອີກ. ເມື່ອໄປເຖິງຄຸກກໍາແຮ້ງພວກລຸງຊຽງກູ່ຍິ່ງເພີ່ມການເຄື່ອນໄຫວໃນຄຸກເພື່ອຕ້ານຝຣັ່ງ ແລະ ການຕໍ່ສູ້ນີ້ຍິ່ງນັບມື້ເພີ່ມທະວີຂຶ້ນເລື້ອຍໆ ດ້ວຍຫຼາຍຮູບຫຼາຍແບບເພື່ອສະໜັບສະໜູນໃນການຕີເອົາຊະນະຝຣັ່ງຢູ່ບັ້ນຮົບດຽນບຽນຟູ.

ພວກມັນເອົາລຸງຊຽງກູ່ ໄປຂັງຢູ່ເກາະກຳແຮ້ງຢູ່ທາງພາກໃຕ້ຫວຽດນາມ[119]. ລາວເຮົາບໍ່ມີໃຜເລີຍຢູ່ທີ່ນັ້ນ, ພວກມັນເອົາລຸງຊຽງກູ່ໄປຢູ່ກັບກອມມູນິດຫວຽດນາມທີ່ຖືກຈັບເຊັ່ນດຽວກັນກັບເພິ່ນ. ເມື່ອຮອດກຳແຮ້ງແລ້ວ, ພວກລຸງຊຽງກູ່ກໍ່ມີການຈັດຕັ້ງເພື່ອເຮັດການຕໍ່ສູ້ຕ້ານຝຣັ່ງຢູ່ໃນຄຸກກຳແຮ້ງ. ລຸງຊຽງກູ່ໄດ້ຕໍ່ສູ້ສົມທົບກັບພວກອ້າຍນ້ອງເພື່ອນທີ່ຢູ່ຄຸກກຳແຮ້ງນີ້. ນັກໂທດລ້ວນແຕ່ແມ່ນທະຫານປະຕິວັດທັງໝົດລວມມີປະມານ 400 ຄົນ, ໃນຈຳນວນນີ້ມີຂັ້ນນາຍພົນກໍ່ຖືກຈັບມາເຊັ່ນກັນ. ຕະຫຼອດໄລຍະເວລາທີ່ຢູ່ໃນຄຸກກຳແຮ້ງນັ້ນພວກລຸງຊຽງກູ່ໄດ້ມີການຕໍ່ສູ້ທາງດ້ານການເມືອງ 2 ຄັ້ງ ທີ່ເດັ່ນທີ່ສຸດທີ່ລຸງຊຽງກູ່ຈື່ບໍ່ລືມຄື: ຄັ້ງທີ1: ພວກເພິ່ນຕໍ່ສູ້ດ້ວຍການອົດອາຫານ, ພວກເພິ່ນໝົດທຸກຄົນໃນຄຸກກຳແຮ້ງ ເຊິ່ງຝຣັ່ງມັນຖືວ່າເປັນນັກໂທດກອມມຸຍນິດພາກັນອົດອາຫານ 9 ມື້. ເປັນຫຍັງພວກລຸງຊຽງກູ່ຈຶ່ງພາກັນອົດອາຫານເຊັ່ນນັ້ນ, ກໍ່ເພື່ອສູ້ກັບຝຣັ່ງ. ພວກລຸງຊຽງກູ່ບໍ່ສາມາດທີ່ຈະອອກສະໜາມຮົບຕີກັບມັນໂດຍກົງ, ແຕ່ພວກເພິ່ນຕ້ອງຕີກັບພວກມັນດ້ວຍແນວຄິດ. ເພື່ອສ້າງຄວາມສົນໃຈຂອງພວກມັນຕໍ່ພວກຢູ່ແນວຫຼັງ, ຫຼຸດຜ່ອນກຳລັງການປະຕິວັດທີ່ກຳລັງຕີຝຣັ່ງ ຢູ່ດຽນບຽນຟູນັ້ນ ພວມຢູ່ໃນໄລຍະທີ່ດຸເດືອດ ແລະ ໜັກໜ່ວງທີ່ສຸດ, ສະນັ້ນພວກເພິ່ນ ຜູ້ຢູ່ໃນຄຸກກຳແຮ້ງ ກໍ່ຕ້ອງໄດ້ປະກອບສ່ວນກັບສະໜາມຮົບດຽນບຽນຟູ ເພື່ອເອົາຊະນະຝຣັ່ງ. ວິທີການຕໍ່ສູ້ແມ່ນທວງໃຫ້ມັນເອົາເຂົ້າໃຫ້ກິນອີ່ມ, ມັນໃຫ້ກິນຜູ້ໜຶ່ງ 400 g ຕໍ່ມື້. ເຂົ້າທີ່ມັນເອົາມາໃຫ້ກິນນັ້ນເປັນເຂົ້າຈ້າວ, ມັນສົ່ງມາໃຫ້ພວກລຸງຊຽງກູ່ບໍ່ຮັບ, ພວກເພິ່ນຊິອົດເຂົ້າໃຫ້ຕາຍໝົດ 4,000 ຄົນນີ້, ຖ້າບໍ່ໄດ້ຕາມຈຸດປະສົງຂອງພວກເພິ່ນ. ພວກລຸງຊຽງກູ່ເວົ້າກັບມັນວ່າ: "ພວກເຈົ້າຕິດໜີ້ພວກຂ້ອຍໝາກຖົ່ວດິນ, ເອົາໝາກຖົ່ວດິນໃຫ້ພວກຂ້ອຍກິນແດ່". ມັນຢຸດ, ຢຸດແລ້ວເຂົາຈົດໄວ້, ທວງໃຫ້ມັນສົ່ງໝາກຖົ່ວດິນມາໃຫ້. ຄັ້ງທີ 2: ພວກລຸງຊຽງກູ່ຕໍ່ສູ້ເພື່ອໃຫ້ເພີ່ມອາຫານ ພວກຂ້ອຍຂຽນໜັງສືທວງໃຫ້ມັນເພີ່ມເຂົ້າໃຫ້

---

119 ເກາະກຳແຮ້ງຢູ່ກາງທະເລພາກໃຕ້ຫວຽດນາມ ເກາະນີ້ສຳລັບຂັງຄົນໂທດ ແລະ ບໍ່ສາມາດໂຕນອອກໄດ້.

ພວກເພິ່ນອີກ 700 g ຕໍ່ມື້. ຄັນບໍ່ໄດ້ຈັ່ງຊັ້ນພວກເພິ່ນຊິຍອມຕາຍໝົດທຸກຄົນ. ຫຼັງຈາກນັ້ນ 9 ມື້ມັນໂທລະໂຄ່ງມາ, ມັນວ່າ: "ພວກຂ້ອຍຍອມແລ້ວ, ໃຫ້ພວກເຈົ້າກິນເຂົ້າສາ". ເມື່ອຕົກລົງກັນແລ້ວ, ມັນເອົາເຂົ້າມາພວກລຸງຊຽງກູ່ກໍ່ພາກັນກິນ. ເວລານັ້ນ ຢູ່ສະໜາມຣົບດຽນບຽນຟູກໍ່ກຳລັງສູ້ກັນຢ່າງດຸເດືອດ ແລະ ກຳລັງການປະຕິວັດກໍ່ພວມຈະໄດ້ໄຊຊະນະ. ພວກລຸງຊຽງກູ່ມີແຜນຕໍ່ສູ້ໃໝ່ອີກ, ຊຸດນີ້ການອົດອາຫານຂອງພວກເພິ່ນໄດ້ 13 ມື້ເຕັມ, ພວກເພິ່ນຕໍ່ລອງໂດຍສະເໜີຂຶ້ນ 7 ຂໍ້ໃຫ້ພວກມັນຄື:

1. ເພີ່ມເຂົ້າໃຫ້ຜູ້ໜຶ່ງ 800 g ຕໍ່ມື້.
2. ໃຫ້ພວກເພິ່ນຮ່ຳຮຽນການເມືອງຢ່າງເປີດເຜີຍ.
3. ໃຫ້ພວກມັນສົ່ງຢາກິນຢາສັກມາໃຫ້ພວກເພິ່ນ.
4. ເລື່ອງແພດໝໍແມ່ນພວກເພິ່ນຈັດການເອງ.
5. ສົ່ງມຸ້ງ ແລະ ຜ້າຫົ່ມມາໃຫ້ພວກເພິ່ນ.
6. ພວກເພິ່ນຂໍປາກກາເພື່ອຂຽນໜັງສືຮ່ຳຮຽນວັດທະນະທຳການເມືອງ.
7. ພວກເພິ່ນຂໍສະເໜີສັກທຸງຝ່າຍເຮົາຂຶ້ນ.

ຕື່ນເຊົ້າມາພວກລຸງຊຽງກູ່ກໍ່ພາກັນຊັກທຸງທາງຝ່າຍເຮົາຂຶ້ນ. ເມື່ອພວກມັນເຫັນແນວນັ້ນມັນຍອມຮັບບໍ່ໄດ້. ພວກລຸງຊຽງກູ່ກໍ່ວ່າ ຖ້າບໍ່ໄດ້ພວກເພິ່ນຍອມຕາຍໝົດ. ໃນມື້ນັ້ນມັນມິດຈີ່ລີ່, ມັນບໍ່ໄດ້ຕອບໂຕ້ພວກລຸງຊຽງກູ່ຢ່າງໃດເລີຍ. ໂຢ! ຕາຍກໍ່ຕາຍ, ພວກລຸງຊຽງກູ່ຫາແຜນໃໝ່ເພື່ອສູ້ກັບມັນ. ຕື່ນເຊົ້າຂອງມື້ໃໝ່ມາພວກລຸງຊຽງກູ່ກໍ່ໄດ້ກຽມເຂົ້າໄວ້ເພື່ອກິນ, ແຕ່ພວກເພິ່ນບໍ່ກິນ, ພວກເພິ່ນເອົາຝັງດິນໄວ້, ບາດນັ້ນຈຶ່ງຄ່ອຍເອົາອອກມາຢາຍກັນກິນພໍບໍ່ຕາຍ. ໄດ້ 9 ມື້, ໃນຕອນກາງຄືນ ຂອງມື້ທີ 9 ປະມານ 12ໂມງ, ມັນໃຫ້ພວກທະຫານຂອງມັນຖິ້ມອາຫານເປັນເຂົ້າຈີ່, ເປັນນ້ຳນົມ, ເປັນຢາຊອງ, ເປັນນ້ຳຕານເຂົ້າໄປໃນເຂດໜາມໝາກຈັບຂອງຄຸກຈົນເຕັມໝົດ ແຕ່ພວກລຸງຊຽງກູ່ສັ່ງການທັງໝົດບໍ່ໃຫ້ໃຜກິນ, ເພື່ອສະແດງນ້ຳໃຈປະຕິວັດ, ຜູ້ໃດກິນຄືຂາດໂລດ. ສຸດທ້າຍມັນມາຈອບເບິ່ງອາຫານ ແລະ ເຄື່ອງທີ່ມັນຖິ້ມໃຫ້ພວກລຸງຊຽງກູ່ນັ້ນ

ຍັງຢູ່ຄືເກົ່າ. ໂຍ! ບາດນີ້ພວກລຸງຊຽງກູ່ພາກັນເຮັດຄືຕາຍທັງໝົດ, ເວລາຜ່ານໄປໄດ້ 9-10 ມື້, ພວກລຸງຊຽງກູ່ພາກັນອອກມານອນຕາກແດດ, ແລ້ວເອົາປາແດກມາທາຕົວ, ແມງວັນບິນມາຕອມເປັນຝູງ [120] . ບາດນີ້ທະຫານມັນມາເຫັນແນວນັ້ນກໍ່ໄປລາຍງານໃຫ້ນາຍມັນວ່າ: ພວກມັນນັກໂທດໃນຄຸກຕາຍໝົດແລ້ວ. ເຂົ້ານ້ຳຊ້ຳປາພວກລຸງຊຽງກູ່ກໍ່ບໍ່ກິນ, ຊິເຮັດແນວໃດໄດ້ 13 ມື້, ມື້ທີ 13 ມັນໄທມາບອກວ່າ: ເຊີນພວກທ່ານກິນເຂົ້າສາ, ພວກເຮົາຍອມແລ້ວ. ພວກລຸງຊຽງກູ່ວ່າ: ກິນກໍ່ກິນແຕ່ຕ້ອງມາເຊັນສັນຍາກັນກ່ອນ. ຈາກນັ້ນມັນກໍ່ເຂົ້າມາເຊັນ. ພວກລຸງຊຽງກູ່ເວົ້າໃຫ້ມັນອີກວ່າ: ເຊັນແລ້ວໃຫ້ພວກເຈົ້າເຂົ້າມາຮັບໃຊ້ພວກຂ້ອຍ. ພວກຂ້ອຍຊິເຮັດແນວໃດ? ມັນວ່າ. ພວກລຸງຊຽງກູ່ວ່າ: ພວກເຈົ້າຕ້ອງມາຮັບໃຊ້ພວກຂ້ອຍຢູ່ໃນຄຸກ. ພາຍຫຼັງເຊັນແລ້ວໄດ້ 5 ມື້ພວກຝຣັ່ງມາຮັບໃຊ້ແຕ່ງໃຫ້ພວກລຸງຊຽງກູ່ກິນ. ເມື່ອພວກມັນມາ, ພວກລຸງຊຽງກູ່ກໍ່ຍັງນອນຢູ່ບ່ອນເກົ່າ. ມັນເອົານ້ຳຕານ, ນ້ຳນົມຈັກຫຍັງຕໍ່ຫຍັງຕາມທີ່ພວກລຸງຊຽງກູ່ສະເໜີໄປນັ້ນມາໃຫ້. ຈາກນັ້ນບັ້ນຮົບດຽນບຽນຟູໄດ້ຮັບໄຊຊະນະ, ມັນປະກາດເລີຍວ່າ: "ພວກຝຣັ່ງວ່າຍອມແລ້ວ, ອິນດູຈີນມອບໃຫ້ພວກເຈົ້າມີສິດ, ພວກຂ້ອຍບໍ່ມີສິດຄວບຄຸມແລ້ວ". ຫຼັງຈາກນັ້ນພວກເຂົາກໍ່ຈັດສົ່ງພວກລຸງຊຽງກູ່ກັບຄືນຖິ່ນຖານຂອງໃຜລາວ; ໂດຍຈັດສົ່ງເປັນ 3 ຊຸດ. ກ່ອນຈະສົ່ງພວກລຸງຊຽງກູ່, ພວກມັນໄດ້ເອົາສົ້ງເສື້ອເຊິ່ງເປັນສົ້ງເສື້ອຂອງຝຣັ່ງນັ້ນມາເບີກຈ່າຍໃຫ້ພວກລຸງຊຽງກູ່ຄົນລະຊຸດ ແລະ ສົ່ງມາເທື່ອລະ 300 ຄົນ. ພວກມັນສົ່ງພວກລຸງຊຽງກູ່ຊຸດທຳອິດຮອດແຄມຝັ່ງທະເລ, ພວກລຸງຊຽງກູ່ກໍ່ພາກັນແກ້ເຄື່ອງທີ່ພວກມັນໃຫ້ນັ້ນຖິ້ມໝົດ, ຍັງແຕ່ສະລິບ ແລະສົ້ງເສື້ອຄາຄີງເທົ່ານັ້ນ. ມາຮອດຊຸດທີ 2 ພວກລຸງຊຽງກູ່ຄົ້ນຄວ້າໃໝ່ວ່າບໍ່ໃຫ້ຖິ້ມສົ້ງເສື້ອນັ້ນ, ມັນບໍ່ມີຜົນປະໂຫຍດຫຍັງເລີຍ, ຖິ້ມໃຫ້ປະຊາຊົນດີກວ່າ. ຊຸດທີ 2 ເມື່ອອອກ

120 ແມງວັນມາຕອມຄົນເພາະເຂົາເອົາປາແດກມາທາຕົນທາໂຕ, ມັນເໝັນຫຼາຍແມງວັນຕອມຈົນເປັນຝູງ,ດັ່ງນັ້ນຝຣັ່ງມາເຫັນມັນເຂົ້າໃຈວ່າຄົນໂທດຕາຍແທ້.

ຈາກທະເລມາຮອດຍາຈາງ[121], ກຸຍເຢິນໄປອີກ 12 ກິໂລແມັດແມ່ນຮອດຄະນະສາກົນເພື່ອປຸ່ງນຊະເລີຍເສິກ, ມັນກໍ່ເອົາຝຣັ່ງມາປ່ຽນ. ຈາກນັ້ນມີດອກໄມ້, ພວງ ມາລາ, ມີຂອງຂວັນຈາກປະຊາຊົນມາຮັບຕ້ອນ ແລະ ຊົມເຊີຍພວກລຸງຊຽງກູ່, ພວກເພິ່ນກໍ່ເອົາສິ້ງເສື້ອໃຫ້ປະຊາຊົນ. ບໍ່ວ່າກາງເວັນແລະກາງຄືນ; ປະຊາຊົນໄປອ້ອມຢູ່ຕາມທາງ, ພວກເພິ່ນກໍ່ເອົາເຄື່ອງໃຫ້ພວກປະຊາຊົນ. ລຸງຊຽງກູ່ຖືກຢູ່ໃນຂະບວນສຸດທ້າຍທີ່ເດີນທາງອອກຈາກຄຸມຂັງກຳແຮ້ງ. ຫຼັງຈາກປ່ຽນຄືນສຳເລັດແລ້ວ, ພວກລຸງຊຽງກູ່ກໍ່ໄປເຂົ້າການຈັດຕັ້ງ; ຂັ້ນເທິງຖາມ: ພວກສະຫາຍຖືກຄຸກ, ຖືກຂັງ, ຖືກເຈັບຊິເມື່ອເຮືອນເມື່ອຊານບໍຫຼືຊິເຮັດແນວໃດ? ລຸງຊຽງກູ່ບອກວ່າ: ບໍ່ເມື່ອ, ຕໍ່ສູ້ຈົນໝົດລົມຫາຍໃຈ. ຈາກນັ້ນລຸງຊຽງກູ່ກໍ່ຢູ່ຫວຽດນາມເຮັດວຽກນຳເພື່ອນໄດ້ 4 ເດືອນ, ພໍດີເຂົາເຈົ້າກໍ່ສົ່ງລຸງຊຽງກູ່ມາລາວມາຢູ່ໃນກອງທັບລາວຢູ່ຊຳເໜືອ.

ຫຼັງຈາກກັບມາລາວຢູ່ຊຳເໜືອ, ລຸງຊຽງກູ່ໄດ້ຖືກບັນຈຸເຂົ້າໃນກອງພັນ 613 ແລະ ໄດ້ຕຳແໜ່ງເປັນນາຍໝວດ, ເຂົາເລື່ອນຕຳແໜ່ງໃຫ້ລຸງຊຽງກູ່ຢ່າງກະທັນຫັນໂລດ. ກອງພັນ 613 ຂອງພວກລຸງຊຽງກູ່ໄປປະຈຳຢູ່ພູນາລ່ອງ, ພວກລຸງຊຽງກູ່ປະຈຳຢູ່ຊາຍແດນ ຊຶ່ງເປັນເຂດແດນລະຫວ່າງສັດຕູກັບຝ່າຍເຮົາ. ເວລາຢູ່ກອງພັນ 613 ນັ້ນ ລຸງຊຽງກູ່ໄດ້ຮັບຄຳສັ່ງໃຫ້ໄປປະຈຳປົດແນວໜ້າແຫ່ງໜຶ່ງຂອງແຂວງຊຳເໜືອ. ລຸງຊຽງກູ່ໄດ້ເອົາອ້າຍນ້ອງໝວດໜຶ່ງໄປປະຈຳຢູ່ປົດນັ້ນ. ເວລາທີ່ຢູ່ປົດແນວໜ້ານັ້ນ ທາງກອງພັນກໍ່ສັ່ງໃຫ້ລຸງຊຽງກູ່ໄປກວດປົດຂອງສັດຕູທີ່ເຂົາເອີ້ນວ່າ: ປົດນາຊາງວ່າ: "ໃຫ້ເຈົ້າໄປກວດເບິ່ງເນີປົດນາຊາງ, ພວກມັນມີປືນຈັກກະບອກ, ພວກມັນປິ່ນປາກປືນໄປທາງໃດ? ປືນນ້ອຍໃຫຍ່ມີເທົ່າໃດແລະມີຊະນິດໃດແດ່? ໃຫ້ເຈົ້າຈົດໝົດແລ້ວຈຶ່ງມາລາຍງານ". ລຸງຊຽງກູ່ໄດ້ຕັດສິນໃຈໄປ ແລະເອົາອ້າຍນ້ອງໄປນຳ 2 ຄົນ, ເວລານັ້ນກັນດານທີ່ສຸດ, ມັນທ້າງໝິ່ນອ້ອມໝົດ, ໝິ່ນຕີນກູດນີ້ລະ. ລຸງຊຽງກູ່ຄິດວ່າ

121 ຍາຈາງ (ຈຣາງ) ແມ່ນຊື່ເມືອງໜຶ່ງທີ່ຕັ້ງຢູ່ແຄມທະເລ ພາກໄຕ້ຂອງຫວຽດນາມ-ກູຍເຢິນກໍ່ແມ່ນຊື່ເມືອງໜຶ່ງຢູ່ພາກໃຕ້ຫວຽດນາມ.

ໄປກາງຄືນມັນບໍ່ເຫັນຫຍັງ ຢ້ານແຕ່ຢຽບໝິ້ນເທົ່ານັ້ນ, ດັ່ງນັ້ນ ເພິ່ນຈຶ່ງຕັດສິນໃຈໄປກາງເວັນນີ້ລະປອດໄພກວ່າ. ພໍຕື່ນເຊົ້າຂຶ້ນມາລຸງຊຽງກູ່ກໍ່ສັ່ງອ້າຍນ້ອງທໍ່ເຂົ້າຈ້າວບີບໆ ໃສ່ແພແລ້ວຍັດໃສ່ຖົງຂອງໃຜຂອງລາວ. ລຸງຊຽງກູ່ສັ່ງອ້າຍນ້ອງວ່າ: ໄປ! ເຮົາໄປກິນເຂົ້າທ່ຽງຢູ່ປິດພຸ້ນລະ. ປິດໄຕນັ້ນມັນມາຕັ້ງຢູ່ໃໝ່ມັນບັກຕົ້ນໄມ້ລີ້ງໝົດຍັງແຕ່ທິວພູນ້ອຍໆທີ່ມັນຕັ້ງປິດຢູ່. ມັນຊຸດຊຸມນໍລະກິດມັນຢູ່ຫັ້ນ. ພວກລຸງຊຽງກູ່ພາກັນອອກເດີນທາງຢ່າງລະມັດລະວັງທີ່ສຸດ. ເມື່ອໄປເຖິງຈຸດໝາຍ ລຸງຊຽງກູ່ໄປນອນລີ້ຢູ່ປາຍໄມ້ລົ້ມຕົ້ນໜຶ່ງທີ່ເຂົາບັກລີ້ງ, ມີທະຫານສັດຕູພວກໜຶ່ງກຳລັງຈະໄປອາບນ້ຳຍ່າງຜ່ານ, ມັນມາຢຽວໃສ່ຫົວລຸງຊຽງກູ່ເພາະພວກມັນບໍ່ຮູ້ວ່າລຸງຊຽງກູ່ນອນຢູ່ພື້ນຕົ້ນໄມ້ຕາຍນັ້ນ. ພວກມັນໄຕ່ຂອນໄປເຍີບໆແລ້ວກໍ່ຖ່າຍໜັກ, ຖ່າຍເບົາລີ້ງ. ມີໝໍໜຶ່ງໜຶ່ງຢາກຍິງ, ຈັບປືນສາກຊວາດໆ ເອົາປືນແຍ່ຂຶ້ນເທິງ. ລຸງຊຽງກູ່ພະຍາຍາມຕິດຕາມສະພາບ ແລະຈົດຈຳທຸກຢ່າງທີ່ກອງພັນບອກເພິ່ນວ່າຕ້ອງເອົາອັນໃດແດ່. ຫຼັງຈາກທີ່ສັງເກດສະພາບຕ່າງໆແລ້ວ ເພິ່ນແຕ້ມແຜນທີ່ປິດມັນໄດ້ໝົດ. ພໍດີໄດ້ຍິນສຽງຂອງພວກມັນດັ່ງມາແຊວໆຢູ່ທ່ານ້ຳພຸ້ນ. ລຸງຊຽງກູ່ກໍ່ເວົ້າກັບອ້າຍນ້ອງທີ່ໄປນຳກັນວ່າ:ໄປ! ໄປຈັບສັດຕູ, ເພິ່ນອອກໄປກ່ອນແລ້ວອ້າຍນ້ອງຈຶ່ງອອກຕາມຫຼັງ. ພວກເພິ່ນກໍ່ຍ່າງໄປຊື່ໆໄປຕຳໃສ່ມັນໂລດລະ, ຈັ່ງບໍ່ຢູ່ແລ້ວບາດນີ້, ພວກເພິ່ນກໍ່ສະກັດໂລດ; ພວກມັນກໍ່ຍິງພວກເພິ່ນ, ຈາກນັ້ນ ບໍ່ຮູ້ວ່າແມ່ນຜູ້ໃດສະກັດຜູ້ໃດ, ເລີຍພ້ອມກັນສະກັດ, ພວກທີ່ຢູ່ເທິງປິດກໍ່ຍິງລົງມາ, ພວກລຸງຊຽງກູ່ທາງນີ້ກໍ່ຍິງຂຶ້ນໄປ. ລູກປືນສະແຕນຂອງຊຽງກູ່ກໍ່ບໍ່ຮູ້ວ່າພວກເຂົາອອກຈາກເພິ່ນເວລາໃດ, ສຸດທ້າຍຍັງເຫຼືອເພິ່ນຜູ້ດຽວເພິ່ນກໍ່ອອກຈາກທີ່ນັ້ນບຸປ່າບຸດົງໄປຄົນດຽວ. ຄໍ່າມາລຸງຊຽງກູ່ບໍ່ຮູ້ທາງຊິອອກໄປຫາກຸ່ມກອງຂອງຕົນເອງ, ໃນຄືນນັ້ນເພິ່ນເລີຍນອນໃນປ່າ. ຕື່ນເຊົ້າມາທາງກອງພັນສັ່ງໃຫ້ອ້າຍນ້ອງໄປນຳຫາສະຫາຍຊຽງກູ່, ໂດຍເອົາໝວດໜຶ່ງໄປ, ທາງກອງພັນສັ່ງວ່າ: ຄັນສະຫາຍຊຽງກູ່ຕາຍແລ້ວກໍ່

ໃຫ້ເອົາຄາບມາ[122]. ທາງກອງພັນສັ່ງທະຫານໄປຫາລຸງຊຽງກູ່ ເພາະເວລານັ້ນພວກລຸງຊຽງກູ່ຢູ່ແນວຫຼັງສັດຕູ. ທະຫານກໍ່ອອກມາເພື່ອຊອກຫາເພິ່ນ, ພໍດີເພິ່ນກໍ່ມາ, ເພິ່ນນໍາທາງມາກໍ່ເຫັນທະຫານໝວດໜຶ່ງຍ່າງມາຕາມເສັ້ນທາງທີ່ເພິ່ນຈະຜ່ານໄປ, ລຸງຊຽງກູ່ເຫັນບໍ່ຄັກເພາະມັນໄກ, ລຸງຊຽງກູ່ຢຸດ ແລະຍ່າງແວ່ເຂົ້າປ່າແຄມທາງເພື່ອລີ້ຊ່ອນຕົນເອງ. ເພິ່ນສົງໄສບະ! ທະຫານສັດຕູບໍ? ເພິ່ນກວດເບິ່ງລູກປືນຂອງຕົນເອງ, ໂອ! ຍັງບັ້ງໜຶ່ງ, ເວລານັ້ນເພິ່ນຄິດວ່າ: ມຶງມາກູຊິຍິງໝົດລູກປືນບັ້ງນີ້ເປັນແນວໃດກໍ່ເປັນ. ມາແລ້ວ, ທະຫານກໍ່ຍ່າງເຍື່ອຍໆມາ, ຍັບມາໃກ້ເຂົ້າໃກ້ເຂົ້າ, ລຸງຊຽງກູ່ກຽມພ້ອມທີ່ຈະລັ່ນປືນຂອງຕົນ, ແຕ່ຕ້ອງຖ້າໃຫ້ພວກມັນມາໃກ້ໆສາກ່ອນ. ລຸງຊຽງກູ່ຈ້ອງຕາເບິ່ງພວກທະຫານດັ່ງກ່າວ, ບະ! ເບິ່ງຄືທາງເຮົາແທ້, ເບິ່ງໄປເບິ່ງມາພວກເຂົາຍ່າງໃກ້ເຂົ້າມາທຸກທີເບິ່ງແລ້ວມັນແມ່ນອ້າຍນ້ອງເຮົາທັງໝົດນີ້ນາ. ລຸງຊຽງກູ່ຈອບເບິ່ງໂອ! ແມ່ນສ່ຽວສີສຸພັນ ຮອງໝວດຂອງເພິ່ນນີ້ລະ. ລຸງຊຽງກູ່ກໍ່ເອີ້ນໃສ່ເລີຍລະວ່າ: ພັນເອີຍໆນີ້ນາຊຽງກູ່ເດີ,ຍັງບໍ່ຕາຍ! ສ່ຽວສີສຸພັນຕອບມາວ່າ:ຊຽງກູ່ບໍ? ລຸງຊຽງກູ່ຕອບໄປວ່າ: ເອີ! ໂອ! ລາວລະນອນປ່ານອນດົງ. ສ່ຽວສີສຸພັນເວົ້າອີກວ່າ: ກອງພັນສັ່ງໃຫ້ພວກທ່ານສີສຸພັນໄປຫາໂຕ, ເພິ່ນວ່າເຖິງຈະຕາຍແນວໃດກໍ່ຢ່າໃຫ້ເອົາໂຕເມືອໃຫ້ໄດ້. ລຸງຊຽງກູ່ຈຶ່ງເວົ້າກັບສ່ຽວສີສຸພັນວ່າ: ໄດ້ແລ້ວບໍ່ໄດ້ຕາຍ. ຈາກນັ້ນພວກເພິ່ນກໍ່ພາກັນເມືອກອງພັນ. ນີ້ກໍ່ແມ່ນການສູ້ລົບຂອງລຸງຊຽງກູ່ໃນເວລາທີ່ຢູ່ເຂດເຕົ້າໂຮມແຂວງຊຳເໜືອ.

ຈົນເຖິງປີ 1957 ພາຍຫຼັງທີ່ມີການຈັດຕັ້ງປ່ອນບັດເລືອກຕັ້ງ ໃນ 10 ແຂວງແລ້ວຊຶ່ງເປັນໄລຍະທີ່ລາວລວມລາວ, ລຸງຊຽງກູ່ກໍ່ໄດ້ກັບຄືນລົງມາພາກໃຕ້ຂອງເພິ່ນນີ້. ເວລາມາລຸງຊຽງກູ່ຖືກອອກເປັນພົນລະເມືອງດີ ແລະມາເຄື່ອນໄຫວຢູ່ພື້ນຖານ. ເວລານັ້ນທ່ານສີຊະນະສີສານເປັນຜູ້ແທນ ທາງຝ່າຍເຮົາຜູ້ແທນແນວລາວຮັກຊາດຢູ່ພາກໃຕ້ລາວ. ຈາກນັ້ນມາຮອດປີ1959, ສັດຕູເລີ່ມ

122 ຄາບແປວ່າຊາກສົບຄົນຕາຍ ຕາມພາສາເຜົ່າຜູ້ໄທ.

ເຄື່ອນໄຫວແຮງ, ພວກມັນຈັບຜູ້ນຳພວກເຮົາຢູ່ວຽງຈັນ, ຢູ່ທາງນີ້ພວກເຮົາກໍ່ທັນທິດ, ພະນັກງານທີ່ເຄື່ອນໄຫວຢູ່ຮາກຖານ ພາກັນໂຕນອອກໝົດ, ໃຜຢູ່ໃສກໍ່ໂຕນຢູ່ນັ້ນ. ເມື່ອເຫັນສະພາບເປັນແນວນັ້ນ ລຸງຊຽງກູ່ ຄິດວ່າຊິເຮັດແນວໃດບາດນີ້, ໝູ່ເພື່ອນສະຫາຍກໍ່ໂຕນອອກໝົດແລ້ວ, ຖ້າເພິ່ນຢູ່ຕໍ່ໄປ ກໍ່ຈະເຄື່ອນໄຫວບໍ່ໄດ້, ລາວຕ້ອງຫາຊ່ອງທາງໃໝ່ເພື່ອດຳເນີນການປະຕິວັດຕໍ່ໄປ. ລຸງຊຽງກູ່ໄດ້ອອກເດີນທາງໄປຫວຽດນາມ, ໄປແຕ່ນາຍົມຈີນຮອດຫວຽດນາມ. ເພິ່ນອອກເຮືອນໄປໂດຍບໍ່ມີໃຜມາຊວນ, ເພິ່ນໄປເອງໄປເຕົ້າໂຮມຢູ່ຊວນທັນ ພໍດີກອງພັນທີ 2 ກໍ່ຖອຍອອກມາພົບກັນຢູ່ຫັ້ນ ແລະ ລຸງຊຽງກູ່ກໍ່ໄດ້ເຂົ້າຮຽນການເມືອງຢູ່ທີ່ນັ້ນ. ພາຍຫຼັງຮໍ່າຮຽນສຳເລັດແລ້ວ ກໍ່ແບ່ງກຳລັງລົງໄປເຄື່ອນໄຫວປຸກລະດົມປະຊາຊົນ ແລະ ສ້າງຮາກຖານຄືນຢູ່ເຂດແຂວງຕ່າງໆຂອງລາວ. ກໍ່ຖືກລົງເຄື່ອນໄຫວຕໍ່ສູ້ຄືນຢູ່ຮາກຖານເຊັ່ນດຽວກັນ. ພໍດີລຸງຊຽງກູ່ກັບມາເຂດເມືອງນາຍົມ ແຂວງສະຫວັນນະເຂດ ແລະ ຖືກບັນຈຸເຂົ້າຢູ່ໃນກອງຮ້ອຍຂອງອິນກອງ, ດຳເນີນເຮັດໜ້າທີ່ເຄື່ອນໄຫວປຸກລະດົມປະຊາຊົນ ເຂົ້າຮ່ວມຂະບວນການປະຕິວັດເພື່ອຕ້ານຈັກກະພັດອາເມລິກາ. ໃນໄລຍະນີ້ແມ່ນປີ 1960 ຢູ່ເຂດເມືອງນາຍົມແມ່ນມີປະຕິຊັງຫຼາຍ, ມີປະມານ 7 ຄົນ ຊຶ່ງແມ່ນລຸງພໍ່ບ້ານສີເປັນຫົວໜ້າ[123]. ສະນັ້ນການເຄື່ອນໄຫວຕ່າງໆຕ້ອງໄດ້ລະມັດລະວັງທີ່ສຸດເພາະຢ້ານເສຍລັບ. ການເຄື່ອນໄຫວຖືກຈຳກັດ, ທາງສັດຕູກໍ່ໜີບຮັດ. ພວກລຸງຊຽງກູ່ຢູ່ທາງສິບບໍ່ຢາກລົງໄປຕິດຕໍ່ກັບຜາລີລາງກໍ່ບໍ່ໄດ້, ພວກທີ່ຢູ່ທາງບ້ານຜາລີລາງຢາກອອກໄປບ່ອນອື່ນກໍ່ບໍ່ໄດ້ ສັດຕູມັນຈຳກັດ ບໍ່ໃຫ້ໄປບ້ານພີ່ນ້ອງ, ເຂົາບໍ່ໃຫ້ໄປມາຫາສູ່ກັນ ເພາະເຂົາຢ້ານວ່າປ່ອຍໃຫ້ປະຊາຊົນໄປມາຫາສູ່ກັນແລ້ວ ປະຊາຊົນເຫຼົ່ານີ້ຈະເຄື່ອນໄຫວການປະຕິວັດຕ້ານພວກເຂົາ. ເວລານັ້ນ ລຸງຊຽງກູ່ເຄື່ອນໄຫວປຸກລະດົມປະຊາຊົນຢູ່ບ້ານສິບບໍ່ ເມືອງບົວລະພາ ແຂວງຄຳມ່ວນ. ປະຊາຊົນໃນບ້ານສິບບໍ່ກໍຢ້ານພວກລຸງຊຽງກູ່ຄືກັນເພາະ

---

123 ລຸງພໍ່ບ້ານສີ ເຜົ່າມະກອງ ຢູ່ບ້ານຜາລີລາງ ຕາແສງນາຍົມ ຢູ່ເມືອງ ວິລະບູລີ ສະຫວັນນະເຂດເປັນປະຕິການ ເປັນພໍ່ບ້ານສັດຕູ.

ຢູ່ບ້ານສິບບໍ່ ກໍ່ມີປະຕິຊັງເຊັ່ນກັນ. ເວລານັ້ນ ສະພາບແມ່ນຫຍຸ້ງຍາກທີ່ສຸດ ແລະ ຊິເຮັດແນວໃດເພື່ອໃຫ້ປະຊາຊົນເຂົ້າໃຈໄດ້. ລຸງຊຽງກູ່ເລີຍຕັດສິນໃຈເຂົ້າໄປໃນບ້ານຜາລີລາງເພື່ອພົບປະແລະໂອ້ລົມປະຊາຊົນ. ຊຽງກູ່ໄດ້ກຽມເອົາອ້າຍນ້ອງໝວດໜຶ່ງ, ພວກເພິ່ນໄປຮອດບ້ານ ພວກເພິ່ນກໍ່ເຂົ້າໄປໂລດ, ແຕ່ປະກົດວ່າບໍ່ມີຜູ້ໃດຢູ່ບ້ານເລີຍ ເພາະເປັນໄລຍະທີ່ເຂົາສັກເຂົ້າໄຮ່, ສະນັ້ນປະຊາຊົນໃນບ້ານພາກັນໄປສັກເຂົ້າໄຮ່ໝົດ ຍັງແຕ່ລຸງພໍ່ບ້ານສີ ຊຶ່ງເປັນຫົວໜ້າບ້ານຢູ່ໃນບ້ານເທົ່ານັ້ນ, ລຸງພໍ່ບ້ານສີເຫັນພວກລຸງຊຽງກູ່ລາວກໍ່ປົບລີ້ພວກລຸງຊຽງກູ່ເຊັ່ນກັນ, ລຸງຊຽງກູ່ເອີ້ນໃສ່ລາວວ່າ: ລຸງເອີຍບໍ່ເປັນຫຍັງ ຊຽງກູ່ໃດ່ມານີ້ນາ, ເຈົ້າຊິບໍ່ເຮັດຫຍັງຂ້ອຍບໍລຸງ? ລຸງຊຽງກູ່ເວົ້າກັບລາວວ່າ: ໂອຍ! ຂ້ອຍຊິເຮັດຫຍັງ, ຂ້ອຍມາພົບເຈົ້າທຳຄວາມເຂົ້າໃຈກັບພວກເຈົ້າ. ລາວໄດ້ຍິນແນວນັ້ນຈຶ່ງຄ່ອຍອອກມາ. ລຸງຊຽງກູ່ເວົ້າໃຫ້ພໍ່ບ້ານວ່າ: ດຽວນີ້ໃຫ້ໝົດທຸກຄົນອອກມາໝົດເດີ, ພວກອ້າຍນ້ອງປະຕິຊັງກໍ່ໃຫ້ອອກມາໝົດ. ພໍ່ບ້ານສີກໍ່ສັ່ງໂລດແລ້ວ, ສັ່ງແລ້ວຊາວບ້ານກໍ່ອອກໝົດ ເພາະພໍ່ບ້ານສີເປັນຫົວໜ້າພໍດີລາວກໍ່ພາຍປືນປື່ນປາກລົງ ແລະ ອ້າຍນ້ອງຄົນອື່ນໆຂອງລາວກໍ່ປື່ນປາກປືນລົງເຊັ່ນດຽວກັນ. ປືນຂອງພວກເຂົາແມ່ນເປັນປືນອັງເລທັງໝົດ. ພວກເຂົາອອກມາກໍ່ມາຈັບມືຖືແຂນກັນກັບພວກລຸງຊຽງກູ່. ລຸງຊຽງກູ່ກໍ່ໂຄສະນາໂລດແລ້ວ, ລຸງຊຽງກູ່ໂຄສະນາວ່າ: ດຽວນີ້ເລື່ອງປືນເລື່ອງຜານີ້ພວກເຮົາເຊົາ, ພວກເຮົາໄປຫາຍິງກວາງຍິງຟານ, ຍິງໝູ, ໝົດແລ້ວໄປລັດເອົາ, ຄະແນນຢ່າຍິງພວກເຮົາ, ຢ່າຂ້າຢ່າຟັນປະຊາຊົນ. ລຸງຊຽງກູ່ອະທິບາຍໃຫ້ເຂົາຮັບຮູ້, ທຳຄວາມເຂົ້າໃຈກັບເຂົາ. ລຸງຊຽງກູ່ກໍ່ອະທິບາຍໃຫ້ເຂົາ ເຖິງຄວາມສາມັກຄີ ແລະ ການພົວພັນໄປມາຫາສູ່ລະຫວ່າງບ້ານນັ້ນບ້ານນີ້, ລະຫວ່າງບ້ານພີ່ບ້ານນ້ອງ, ໃນທີ່ສຸດພວກເຂົາເຫັນດີເຫັນພ້ອມວ່າຈະປ່ອຍໃຫ້ປະຊາຊົນບ້ານຕ່າງໆໄປມາຫາສູ່ກັນໄດ້. ຈາກນັ້ນເຂົາເຈົ້າກໍ່ເອົາເຫຼົ້າໄຫບັກໃຫ່ຍມາໃຫ້ອ້າຍນ້ອງກິນໝົດແລ້ວຕໍ່ອີກ. ເຂົາຈັບໄກ່ 9 ໂຕ ມາຂ້າແຕ່ລຸງຊຽງກູ່ວ່າ: ບໍ່! ບໍ່ເອົາ, ພໍ່ບ້ານວ່າ: ບໍ່ເອົາໄກ່ເອົາໝູບໍ? ເຂົາວ່າ. ຖ້າພໍໃຈເຂົາເຮັດໃຫ້ກິນຢູ່ຫັ້ນນາ. ຈາກການທີ່ກິນ

ດື່ມນຳກັນແບບເປັນກັນເອງແລ້ວ, ມີຜູ້ໜຶ່ງເວົ້າກັບລຸງຊຽງກູ່ວ່າ: ເອີຍ! ຫຼານ
ເອີຍ! ມີນັກສືບຜູ້ໜຶ່ງຢູ່ເຮືອນ, ຢູ່ບ້ານເຮົານີ້, ລຸງຊຽງກູ່ຖາມລຸງເພິ່ນວ່າ: ລຸງ
ຢາກໃຫ້ພວກລຸງຊຽງກູ່ເຮັດແນວໃດລຸງ? ພໍ່ລຸງເພິ່ນຕອບວ່າ:ໃຫ້ເຈົ້າເອົາໄປຂ້າ
ສາ. ລຸງຊຽງກູ່ບອກລຸງນັ້ນວ່າ: ຂ້າເຮັດອີ່ຫຍັງ, ຊິຂ້າຄືນຂ້າເຮັດອີ່ຫຍັງ,
ຄືນກິນຢາເພິ່ນຍັງນະໂຍບາຍ, ສຳລັບພວກເພິ່ນແລ້ວ ແມ່ນນະໂຍບາຍຄືກັນ,
ລຸງຊຽງກູ່ວ່າ: ປະຢູ່ຫັ້ນແລ້ວ, ບໍ່ເປັນຫຍັງດອກຖ້າພວກເຈົ້າຖືກັນໝົດບ້ານນີ້,
ມັນຊິໄປຟ້ອງໃຫ້ປະຕິການແນວໃດກໍ່ຢ່າ ມັນກໍ່ເຮັດຫຍັງກັບພວກເຈົ້າບໍ່ໄດ້
ດອກ ເພາະພວກເຈົ້າຖືກັນ, ຫຼັງຈາກນັ້ນກໍ່ມີປະຊາຊົນຈຳນວນໜຶ່ງມາບອກ
ລຸງຊຽງກູ່ວ່າ: ເສຍລັບແລ້ວພວກເຈົ້າມາແນວນີ້ຊິເຮັດແນວໃດ ? ລຸງຊຽງກູ່ວ່າ:
ບໍ່ຍາກ, ບາດຂ້ອຍເມືອໃຫ້ເຈົ້າຍິງປືນຜູ້ລະບາດ, ເມື່ອຮອດຍາມພວກລຸງຊຽງກູ່
ຊິເມືອແລ້ວພວກເຂົາກໍ່ຍິງປືນສາມບາດ, ລຸງຊຽງກູ່ສັ່ງອ້າຍນ້ອງຍິງປືນຈັກຟາດ
ຂຶ້ນຜາພິລາງພຸ້ນ ອູດໆອູດໆ, ແລ້ວລຸງຊຽງກູ່ກໍ່ສັ່ງອ້າຍນ້ອງເຊົາ. ພວກປະຕິ
ຊັງມັນຍ້ານໂຕນຢ້າວໂຕນເຮືອນ ຈູງແຂນກັນເຂົ້າລີ້ດ. ກ່ອນລຸງຊຽງກູ່ຊິເມືອ
ລຸງຊຽງກູ່ເວົ້າກັບເຂົາວ່າ: ເຮັດແນວນີ້ພວກມັນຈຶ່ງບໍ່ຮູ້ຈັກວ່າພວກລຸງຊຽງກູ່ມາ.
ຫຼັງຈາກ ພວກລຸງຊຽງກູ່ເມືອແລ້ວ ໃຫ້ພວກເຈົ້າເອົາດິນທາໂຕ ແລ້ວໄປລາຍ
ງານປົດນາຍົມວ່າ ຕີອິດສະຫຼະແຕ່ບໍ່ແພ້ເຂົາ. ໃຫ້ພວກເຈົ້າເວົ້າແນວນັ້ນເນີ,
ພວກເຂົາກໍ່ປະຕິບັດຕາມລຸງຊຽງກູ່ວ່າ, ຈາກນັ້ນພວກລຸງຊຽງກູ່ເມືອແລ້ວ ເຂົາກໍ່
ເອົາດິນມາທາແຄ່ງທາຂາທາໝົດຕົນໂຕ ແລ້ວກໍ່ໄປລາຍງານວ່າ ອິດສະຫຼະ
ເຂົ້າມາພວກເຮົາຕີກັບອິດສະຫຼະ ແຕ່ບໍ່ແພ້ອິດສະຫຼະ. ສ່ວນປືນທີ່ເຂົາຖືນັ້ນ
ແມ່ນປະໄວ້ນຳເຂົາ, ພວກລຸງຊຽງກູ່ມອບຄືນໃຫ້ເຂົາ. ຕໍ່ມາບໍ່ດົນພວກອ້າຍ
ນ້ອງດັ່ງກ່າວກໍ່ມາຫາທາງພວກລຸງຊຽງກູ່ໝົດ ແລະ ເຄື່ອນໄຫວເຮັດການປະ
ຕິວັດນຳພວກລຸງຊຽງກູ່ຈົນໄດ້ຮອດນາຍຮ້ອຍ.

ໃນປີ 1961 ຕີປົດທ່າປະໂຈັນ[124], ເວລານັ້ນນາຍພົນອິນກອງເປັນນາຍຮ້ອຍ ລຸງຊຽງກູ່ເປັນນາຍໝວດຢູ່ໃນກອງຮ້ອຍດຽວ, ພວກລຸງຊຽງກູ່ມີການແຕ່ງຕັ້ງຕີປົດໂດຍມີການວາງແຜນຢ່າງຄັກແນ່ ຄືທຳອິດແມ່ນປຸກລະດົມເອົາປະຊາຊົນລົງມາແຕ່ບໍລິລະພາມາແຫ່ຂະບວນເຂົ້າໄປໃນປົດທ່າປະໂຈນ. ປະຊາຊົນບ້ານຕ່າງໆ ກໍ່ພາກັນແຫ່ຂະບວນການເຂົ້າໄປໃນປົດທ່າປະໂຈນ. ສ່ວນພວກລຸງຊຽງກູ່ນັ້ນໄດ້ຈັດຕັ້ງກັນມອບໜ້າທີ່ໃຫ້ແຕ່ລະຄົນຮັບຜິດຊອບ ແລະເຂົ້າໄປໃນປົດຂອງສັດຕູຕາມແຕ່ລະທິດ ໃນຕອນກາງຄືນເພື່ອກວດເບິ່ງສະພາບການຢູ່ໃນປົດ. "ສະຫາຍຊຽງກູ່ຂຶ້ນໄປທາງນີ້ເດີໝວດເຈົ້າ, ໝວດສະຫາຍຄຽນຂຶ້ນທາງນີ້, ໝວດສະຫາຍຄຳແດງຂຶ້ນທາງນີ້". ກອງທະຫານກອງຮ້ອຍໜຶ່ງຂອງພວກລຸງຊຽງກູ່ໃນເວລານັ້ນມີຢູ່ສາມໝວດ. ພວກລຸງຊຽງກູ່ເຂົ້າໄປໃນປົດຂອງສັດຕູໃນຕອນກາງຄືນເພື່ອກຽມຈະຕີປົດ. ພວກລຸງຊຽງກູ່ງົມມືດເພື່ອເຂົ້າໄປໃນປົດໂດຍຜ່ານຮົ້ວໜາມໝາກຈັບ, ພວກລຸງຊຽງກູ່ໄປຢູ່ໃນວົງປົດລ້ອມຂອງສັດຕູ. ຕື່ນເຊົ້າມາພວກລຸງຊຽງກູ່ຖືກປົດລ້ອມໝົດ, ສັດຕູແລະຝ່າຍເຮົາຢູ່ໃກ້ໆກັນ ແຕ່ພວກມັນບໍ່ເຫັນພວກລຸງຊຽງກູ່. ພໍດີປະຊາຊົນກໍ່ແຫ່ຂະບວນເຂົ້າມາພໍບໆ.ພວກລຸງຊຽງກູ່ໄດ້ຍິນສັດຕູເວົ້າ: ເຊົາໆ, ບໍ່ເຂົ້າມາບໍ່ເຂົ້າມາ. ໃນຂະບວນການນັ້ນມີຄົນຝ່າຍເຮົາແດ່ ທີ່ປອມຕົວເປັນປະຊາຊົນ, ປະຊາຊົນວ່າຈະເຂົ້າໄປມັນອັດປະຕູ. ມີໝໍໜຶ່ງຊື່ໝໍເຫຼົາເດີຊຶ່ງເປັນທະຫານສັດຕູ. ມັນເວົ້າຂຶ້ນວ່າ: ເດີຊິແທງໃດຖ້າເຂົ້າມາ. ປະຊາຊົນເວົ້າກັບມັນວ່າ: ຊິເຂົ້າໄປຫາເພິ່ນເດ. ເວລານັ້ນສັດຕູມັນຢ້ານມັນກະວຸ້ນກະວາຍ, ມັນຍິງປືນຈັກຂູ່ປະຊາຊົນ, ປະຊາຊົນຢ້ານ, ບໍ່ທ່ຽງໝັ້ນແຕກໝົດປົບໜີເມືອບາມະຄຽດ. ຫຼັງຈາກປະຊາຊົນປົບເມືອໝົດແລ້ວພວກລຸງຊຽງກູ່ກໍ່ວາງແຜນຕີປົດ. ໝົດມື້ໜຶ່ງພວກລຸງຊຽງກູ່ຕີປົດຢູ່ຫັ້ນ, ຍິງປືນໃຫຍ່ສອງກະບອກໃສ່ປົດສັດຕູໝົດ 860 ລູກ, ແຕ່ກໍ່ບໍ່ໄປບໍ່ມາລຸງຊຽງກູ່ເລີຍມີຫົວຄິດອັນໜຶ່ງເກີດຂຶ້ນ, ເພິ່ນເວົ້າກັບນາຍຮ້ອຍວ່າ ລາວຊິເອົາປືນ

124 ປົດທ່າປະໂຈັນ ຢູ່ບ້ານທ່າປະໂຈັນ ຕາແສງບໍລິລະພາ ເມືອງບໍລິລະພາ ແຂວງຄຳມ່ວນ.

ຂຶ້ນໄປຢູ່ຜາພຸ້ນຍິງລົງໃສ່ປົດຂອງສັດຕູ, ຊຽງຈະເອົາອ້າຍນ້ອງໝູ່ໜຶ່ງໄປນຳ, ແຕ່ລຸງອິນກອງເວົ້າວ່າ: ໂຕເຮັດໄດ້ບໍ່? ລຸງຊຽງກູ່ເວົ້າກັບລຸງອິນກອງວ່າ: ໄດ້ນາ! ເປັນຫຍັງຈຶ່ງບໍ່ໄດ້. ພໍດີລຸງຊຽງກູ່ ແລະ ອ້າຍນ້ອງໝູ່ໜຶ່ງກໍ່ຂຶ້ນໄປ, ເມື່ອຂຶ້ນໄປເຖິງໂຍ! ເຫັນແລ້ວ, ເຫັນປົດມັນຢ່າງຈະແຈ້ງເພາະວ່າຜານ້ອຍຢູ່ຟາກນ້ຳ. ລຸງຊຽງກູ່ບໍ່ໄດ້ເວົ້າຫຍັງ, ປືນພວກລຸງຊຽງກູ່ຟາດລົງເລີຍແລ້ວ, ສັດຕູແຕກກະ ຈະເລີຍ, ພວກທີ່ຢູ່ໃນຂຸມແມ່ນອອກບໍ່ໄດ້ເລີຍ, ບັກໃດອອກມາຖືກຍິງໂລດ, ຮອດກາງຄືນມາສັດຕູກໍ່ແຕກເລີຍຖືວ່າ ພວກເຮົາໄດ້ໄຊຊະນະ. ເວລານັ້ນລຸງຊຽງກູ່ເປັນນາຍໝວດ, ພວກເພິ່ນສືບຕໍ່ຕີປົດ ທ່າບໍ່ແຕນບໍ່ໄດ້ຮັບໄຊຊະນະ, ເລີຍໄປຕີປົດທ່າຊຽງຫວັງອີກ. ກ່ອນຈະອອກໄປຕີປົດທ່າຊຽງຫວັງທາງທິວ ໜ້າກອງຮ້ອຍວ່າ: ສະຫາຍຊຽງກູ່ເຈົ້າໄປຍຶດເອົາປືນປະຕິຊັ້ງເດີ, ເອົາໝວດໜຶ່ງຂອງສະຫາຍໄປຍຶດເອົາປືນປະຕິຊັ້ງຢູ່ບ້ານນາດອນຢູ່ແນວຫຼັງສັດຕູ. ບ້ານນາດອນມີ 300 ປາຍຫຼັງເຮືອນ. ລຸງຊຽງກູ່ພາທະຫານຂອງຕົນອອກໄປ, ມຸ້ງໜ້າໄປຫາບ້ານນາດອນ. ສ່ວນນາຍພົນອິນກອງກໍພາທະຫານໄປຕີທ່າຊຽງຫວັງ. ພວກລຸງຊຽງກູ່ໄປຕີເອົາບ້ານນາດອນ ໂດຍສຽງປືນບໍ່ແຕກ, ໄປຍຶດເອົາປືນຂອງພວກປະຕິຊັ້ງ. ໄປຮອດມີທະຫານກອມມັງໂດຂອງມັນຢູ່ເຮືອນຕາແສງ 4 ຄົນ. ອ້າຍນ້ອງວ່າ: ຊິເຮັດແນວໃດ, ທິວໜ້າ? ລຸງຊຽງກູ່ວ່າ: ໄປ! ໄປນຳກູນີ້. ເມື່ອໄປຮອດເຮືອນຂອງຕາແສງ, ພວກລຸງຊຽງກູ່ຈອບໆເຂົ້າໄປ. ລຸງຊຽງກູ່ວ່າ: " ນີ້ລະ! ເຂົາວ່າຢູ່ນີ້. ພວກລຸງຊຽງກູ່ເລີຍຍຸດພວກປະຕິຊັ້ງ: ພວກເຈົ້າຢ່າຕິງເນີ, ບາດນີ້ກອງພັນທີ 2 ມາຮອດແລ້ວ, ພວກເຮົາບໍ່ຂ້າພວກເຈົ້າດອກ". ພວກມັນກໍ່ຍົມືຂຶ້ນທິວແລ້ວວ່າ: ໂອຍຊິຂ້າພວກຂ້ານ້ອຍບໍ່ອາດຍາເອີຍ! ຊຽງກູ່ເວົ້າກັບພວກມັນວ່າ: ບໍ່, ບໍ່ຂ້າດອກ. ແຕ່ພວກເຂົາບໍ່ເຊື່ອ, ພວກເຂົາໂຕນລົງເຮືອນ, ພວກລຸງຊຽງກູ່ຂຶ້ນໄປກວດເບິ່ງປືນກາບິນ 4 ກະບອກ, ຖາມໄທເຮືອນວ່າ: ອັນນີ້ເຄື່ອງໃຜ? ນາງໜຶ່ງກໍ່ບອກວ່າ: ອັນນີ້ເຄື່ອງຂອງພໍ່ຂ້ານ້ອຍ. ພວກລຸງຊຽງກູ່ກໍ່ບໍ່ແຕະຕ້ອງ. ອັນໃດບໍ່ແມ່ນເຄື່ອງຂອງສັດຕູກໍ່ບໍ່ເອົາ, ເຄື່ອງພວກລຸງຊຽງກູ່ເອົາເຄື່ອງຂອງສັດຕູເທົ່ານັ້ນ. ຫຼັງຈາກລົມ

ກັນແລ້ວພວກເພິ່ນໂຄສະ ນາອີກ: ບໍ່ຢ້ານບໍ່ກືວເນີ, ພວກຂ້ອຍບໍ່ຂ້າດອກ. ຈາກນັ້ນພວກລຸງຊຽງກູ່ກໍ່ໄປຍຶດເອົາປືນຢູ່ແຕ່ລະຫຼັງຄາເຮືອນ, ໂດຍແມ່ນເຂົາເອງຍື່ນໃຫ້ພວກລຸງຊຽງກູ່. ຫຼັງຈາກເອົາໝົດປືນຢູ່ໃນບ້ານກໍ່ພໍດີແຈ້ງ. ໃນຄືນນັ້ນພວກລຸງຊຽງກູ່ຍຶດປືນໄດ້ທັງໝົດ 30 ກະບອກ. ແຈ້ງມາແລ້ວພວກລຸງຊຽງກູ່ຍຶດປືນຂອງສັດຕູໄດ້ໝົດແລ້ວທາງກອງຮ້ອຍສັ່ງວ່າ: ໝວດຂອງສະຫາຍຊຽງກູ່ໃຫ້ສືບຕໍ່ເຄື່ອນໄຫວຢູ່ແນວຫຼັງຂອງສັດຕູ. ສ່ວນຍັງອີກສອງໝວດ ໃຫ້ຂຶ້ນເມືອເຂດປົດປ່ອຍຂຶ້ນເມືອແນວຫຼັງ. ໃຫ້ພວກສະຫາຍນຳພາຕີສັດຕູ, ກໍ່ສ້າງກອງຫຼອນຢູ່ຮາກຖານ. ສ່ວນປືນທີ່ພວກສະຫາຍຍຶດມາໄດ້ 30 ກະບອກນັ້ນມອບໃຫ້ກອງຫຼອນໝົດ. ພວກລຸງຊຽງກູ່ກໍ່ໄດ້ປະຕິບັດຕາມ. ໝວດຂອງລຸງຊຽງກູ່ກໍ່ເຄື່ອນໄຫວຢູ່ແນວຫຼັງຂອງສັດຕູ. ຢູ່ຕໍ່ມາມັນຮູ້ຈັກແລ້ວວ່າກຳລັງຂອງພວກລຸງຊຽງກູ່ ມີໜ້ອຍມັນຈຶ່ງເອົາສອງກອງພັນມາປິດລ້ອມໝົດຢູ່ແຕ່ລະບ້ານ, ທາງເມືອງເວົ້າວ່າ: ພວກສະຫາຍເອີຍຖອນສາ, ເພາະວ່າພວກເຮົາຫາກິນຫາຢູ່ບໍ່ກຸ້ມພວກສະຫາຍ! ລຸງຊຽງກູ່ວ່າ: "ຢູ່ໃສກໍ່ມີສັດຕູ, ພວກເຮົາບໍ່ໄດ້ຖອນ, ບໍ່ມີຄຳສັ່ງຂອງກອງບັນຊາການເດັດຂາດພວກຂ້ອຍບໍ່ຖອນ. ຖ້າພວກສະຫາຍລ້ຽງບໍ່ກຸ້ມ ພວກຂ້ອຍຊິເຄື່ອນໄຫວຫາກິນເອງ". ຈາກນັ້ນພວກລຸງຊຽງກູ່ກໍ່ທັງເຄື່ອນໄຫວທັງຫາກຸ້ມຕົນເອງ ໄປພ້ອມ. ລຸງຊຽງກູ່ພາທະຫານເຄື່ອນໄຫວປຸກລະດົມປະຊາຊົນຢູ່ແຕ່ລະບ້ານ. ສັດຕູມັນອອກພວກລຸງຊຽງກູ່ເຂົ້າແທນບ່ອນມັນຍາມ, ລະດົມເຂົ້ານຳປະຊາຊົນ. ພວກລຸງຊຽງກູ່ອອກມາເຂົ້າແທນ, ບາງຄັ້ງສັດຕູແລະ ພວກລຸງຊຽງກູ່ກໍ່ເຫັນກັນຢູ່ຕາມທົ່ງນາ ແລະ ປະທະກັນພໍຍັບໆແຍບໆ, ໃນໄລຍະນັ້ນການປະກັນແບບນີ້ມີສາມເທື່ອ.

ຫຼັງຈາກນັ້ນທາງກອງບັນຊາການກໍ່ສັ່ງໃຫ້ພວກລຸງຊຽງກູ່ເມືອປົດປ່ອຍຊຳເໜືອ, ທາງເມືອງໄດ້ຝາກນັກຮຽນໃຫ້ໄປນຳພວກເພິ່ນ 4 ຄົນ ແລະເວົ້າວ່າ: ໃຫ້ພວກສະຫາຍເອົາເມືອພຸ້ນແດ່ ເມືອສູນກາງພຸ້ນແລ້ວ. ລຸງຊຽງກູ່ເວົ້າວ່າ: ໄປນຳພວກຂ້ອຍບໍ່ຮັບປະກັນ, ພວກຂ້ອຍໄປທັງກາງເວັນ ແລະ ກາງຄືນບາງທີກໍ່ສູ້ຮົບຕົບຕີກັນ, ບໍ່ຢາກເອົານັກຮຽນໄປນຳແຕ່ຖ້າພວກສະຫາຍຫາກວ່າໃຫ້

ໄປນຳພວກຂ້ອຍ, ມີຫຍັງມາບໍ່ໃຫ້ຕີ! ເມືອງກໍວ່າ: ບໍ່, ນັກຮຽນເຂົາກໍ່ແອບຄືກັນ. ລຸງຊຽງກູ່ວ່າ: ໄປກໍ່ໄປຄັນບໍ່ຕີບໍ່ຫຍັງກໍ່ໄປ. ລຸງຊຽງກູ່ເວົ້າວ່າ ພວກເຈົ້າສິ່ງທາງລັບດີກວ່າບໍ? ມັນນຳທາງນີ້ມັນຕີກັນ! ເຫັນບໍຜ່ານມາພໍ້ກັນຢູ່ໃສກໍ່ຕີກັນຢູ່ຫັ້ນໂລດ. ເຂົາເວົ້າວ່າ: ບໍ່ເປັນຫຍັງເຂົາກໍ່ແອບຄືກັນ. ຈາກນັ້ນກໍ່ພໍດີ 5 ໂມງແລງພວກລຸງຊຽງກູ່ອອກເດີນທາງ, ບາດນີ້ສັດຕູລັດສະກັດຕາມທາງສອງກອງຮ້ອຍ, ພວກມັນລັດສະກັດພວກລຸງຊຽງກູ່ຢູ່ທົ່ງນາບ້ານສັງສະແລຂະໜາດ 4-5 ຫຼາ. ພວກລຸງຊຽງກູ່ກໍ່ເດີນທາງໄປຮອດເຂດແນວຫຼັງທ່າແຂກ ລະຫວ່າງບ້ານຍາງກາງ, ຍາງກຸມບ້ານສັງຊຽງແລ, ນາດອນ ໄປຮອດຈຸດກາງແຄມທົ່ງນາມີກົກພ້າວສອງກົກແລະຖຽງໃຫຍ່ຢູ່ຫັ້ນ. ພໍຄ້າຍແລງສີມົວໆ, ພວກລຸງຊຽງກູ່ກໍ່ສັ່ງອ້າຍນ້ອງໝວດຢູ່ທາງໜ້າວ່າ: ເຫດການຢູ່ທາງໜ້າຂອງພວກເພິ່ນຕ່າງ! ປາກົດການຄືມີແສງເຫຼື້ອມມາບມິບ, ມາບມິບ". ພວກລຸງຊຽງກູ່ກໍ່ນັ່ງລີງ, ລຸງຊຽງກູ່ຄິດວ່າ ແນວໃດບາດນີ້, ເອີ! ແນວໃດກໍ່ແນວ, ລຸງຊຽງກູ່ຕັດສິນໃຈສັ່ງໃຫ້ອ້າຍນ້ອງຜູ້ໜຶ່ງລຸກຂຶ້ນ: ເຈົ້າລຸກຂຶ້ນໂລດຖ້າແມ່ນສັດຕູມັນຍິງ; ລຸງຊຽງກູ່ກໍ່ລຸກຂຶ້ນນຳ. ມັນຍິງໂລດແລ້ວບາດນີ້, ປັ້ງໆ, ເອົາໄດ້ແລ້ວສັດຕູແລ້ວ ເອົາເດີເຖິງຂັ້ນສຸດທ້າຍແລ້ວໄປທາງໃດກໍ່ບໍ່ມີທາງຈະໄປແລ້ວທາງໜ້າກໍ່ມີສັດຕູ, ບາດນີ້ ລຸງຊຽງກູ່ສັ່ງ: ບຸກ! ອ້າຍນ້ອງພວກລຸງຊຽງກູ່ຕີເລີຍແລ້ວ, ທຳອິດພວກເພິ່ນກໍ່ຍິງມັນກໍ່ຍິງ, ມັນມີຮອດສອງກອງຮ້ອຍ, ລຸງຊຽງກູ່ມີພຽງໝວດດຽວ, ຕີໄປມັນຢຸດ ພວກລຸງຊຽງກູ່ກໍ່ຢຸດ. ເຖິງຂັ້ນຕິຊຸດນັ້ນ ອ້າຍນ້ອງທະຫານເພິ່ນລາຍງານວ່າ: ເຮັດແນວໃດ? ໝົດລູກປືນແລ້ວ! ເວລານັ້ນ ລຸງຊຽງກູ່ຄິດວ່າ: ໂອ! ຊິເຮັດແນວໃດເດ່!ໝົດລູກປືນແລ້ວ? ບາດນີ້ ຖອຍກໍ່ຖອຍບໍ່ໄດ້ຖອຍກໍ່ຕາຍໂລດ, ລຸງຊຽງກູ່ຕັດສິນໃຈສັ່ງໃຫ້ອ້າຍນ້ອງພວກເພິ່ນຕະລຸມບອນ. ພວກລຸງຊຽງກູ່ຍິງຟາດໄປ ຫາພວກມັນແລ້ວກໍ່ອາໂລໄຊ: ຕະລຸມບອນ! ໝາກແຕກໃຜໝາກແຕກແກວ່ງກາຍຫົວເຂົ່າ ຊຸມທີ່ມັນແຕກກະແຕກໄປ, ພວກສັດຕູມັນແຕກໝົດສາມກອງຮ້ອຍ, ພວກມັນກໍ່ເຈັບຫາມກັນໄປ. ຕາມປະຊາຊົນລາຍງານຢູ່ໃນຫັ້ນຕາຍສອງຄົນ. ນອກນັ້ນບໍ່ເຫັນໃຜໝົດ. ພວກລຸງຊຽງກູ່ຍຶດໄດ້

ລູກປືນ 4 ແກັດ. ເອີດີໃຈແລ້ວໄດ້ລູກປືນຕື່ມ ເພາະລູກປືນຂອງພວກເພິ່ນໝົດແລ້ວເດ.

ຮອດປີ 1962 ລຸງຊຽງກູ່ຖືກມາຢູ່ແຂວງສະຫວັນນະເຂດ. ທ້າວເຊີນເປັນນາຍທະຫານຢູ່ສະຫວັນນະເຂດ, ເຂົາສິ່ງລຸງຊຽງກູ່ມາບັນຊາທະຫານ ຢູ່ສະຫວັນນະເຂດ, ຫຼັງຈາກເພິ່ນມາຮອດເມືອງພິນ ກອງບັນຊາທະຫານທາງນີ້ມອບໝາຍໜ້າທີ່ໃຫ້ເພິ່ນໄປບັນຊາກອງເອກະລາດ 27, ກອງເອກະລາດ 27 ເວລານັ້ນມີແຕ່ 12 ຄົນ, ຫຼັງຈາກເຂົາມອບໃຫ້ລຸງຊຽງກູ່ຮັບຜິດຊອບແລ້ວເພິ່ນກໍ່ສ້າງກອງນີ້ຂຶ້ນຈົນເຕັມກອງຮ້ອຍ. ຈາກນັ້ນກອງຮ້ອຍຂອງພວກລຸງຊຽງກູ່ກໍ່ໄປຮັກສາແນວໜ້າຢູ່ເສັ້ນທາງເລກ 9, ສັດຕູຢູ່ຟາກນັ້ນ ພວກລຸງຊຽງກູ່ຢູ່ຟາກນີ້. ມາຮອດປີ1967 ສັດຕູມາບຸກສາມຫຼຽມ, ມັນບຸກຕອນ 12 ໂມງຕອນກາງຄືນ, ມັນບຸກຢ່າງຂະໜາດໜັກ. ຕີກັນຢູ່ນັ້ນມັນໃຊ້ຍົນ 3 ລຳ ມາຍິງໃສ່ປືດ, ທັງຖິ້ມໂບມ, ຍິງປືນໃຫຍ່ 105, 5-6 ກະບອກສຸມໃສ່. ຫວິດນັ້ນມັນເອົາທະຫານລາບຂຶ້ນມາຕີ, ແຕ່ລຸງຊຽງກູ່ສັ່ງເດັດຂາດ, ອ້າຍນ້ອງລຸງຊຽງກູ່ເປັນຕາຍບໍ່ໜີຈາກປືດ. ແຕ່ກ່ອນບ່ອນນີ້ມີກົກຈິກ, ກົກຮັງຫຼາຍໆ, ສຸດທ້າຍແປນຄືເດີ່ນວັດ, ບໍ່ມີຫຍັງ. ແຕ່ຊຸດນັ້ນສັດຕູບຸກເຂົ້າບໍ່ໄດ້. ມັນບຸກຮອດ 7 ໂມງເຊົ້າ, ສ່ວນອ້າຍນ້ອງລຸງຊຽງກູ່ ເວລານັ້ນກໍ່ຖອຍໝົດ,ຍັງແຕ່ລຸງຊຽງກູ່ຜູ້ດຽວກັບຕິດຕໍ່ສອງຄົນ ແລະປືນຈັກກະບອກໜຶ່ງ, ສູ້ບໍ່ໄຫວບໍ່ມີຫຍັງແລ້ວ. ສຸດທ້າຍກອງພັນ 18 ມາຊ່ວຍແຕ່ເຊົ້າ, ສັດຕູຕາຍ 33 ບັກ ມີນາຍພັນຜູ້ໜຶ່ງຕາຍຢູ່ຫັ້ນ, ສ່ວນນາຍຮ້ອຍແມ່ນຫຼາຍບັກນັບບໍ່ໄດ້, ນາຍພັນຜູ້ຕາຍຫັ້ນແມ່ນກົມມະດັງນາມ[125] ມັນ ຕາຍຄາໜາມໝາກຈັບ.

ໃນປີ 1969-1972 ແມ່ນໄລຍະບັ້ນຮົບລຳເຊີນໃນໄລຍະນັ້ນ ລຸງຊຽງກູ່ຢູ່ກອງຮ້ອຍເອກະລາດ 27 ເພິ່ນບໍ່ໄດ້ເຂົ້າຮ່ວມໃນການສູ້ຮົບຕົວຈິງກັບ

---

125 ກົມມະດັງນາມ ແມ່ນ ທ້າວນາມ ໄດ້ຊັ້ນນາຍກົມມະດັງ ເອີ້ນຕາມຝຣັ່ງ.

ສັດຕູ, ແຕ່ເພິ່ນເປັນຜູ້ເຂົ້າຮ່ວມ ລົມທົບກວດສະໜາມພາຍຫຼັງການສູ້ຮົບເສັດສິ້ນ.

ໃນໄລຍະເຮັດການປະຕິວັດຕໍ່ຕ້ານພວກລ່າເມືອງຂຶ້ນຝຣັ່ງ ກໍໄດ້ຕີຝຣັ່ງຕາຍຫຼາຍ, ຕີຢູ່ປົດໂກນຕັນ[126] ລົມທົບທວງດນາມ ຝຣັ່ງຕາຍເຖິງ 20 ຄົນ, ໃຜເປັນຜູ້ຍິງນັ້ນ ແມ່ນບໍ່ຮູ້ ແລະ ລຸງຊຽງກູ່ຂ້າເອງແມ່ນບໍ່ເຫັນ.

ພາຍຫຼັງຢຸດເສິກ ລຸງຊຽງກູ່ຖືກໄປເຮັດວຽກຢູ່ຫ້ອງການເມືອງ. ອອກຈາກຫ້ອງການເມືອງ ເພິ່ນພັດໄປເຮັດວຽກຢູ່ຫ້ອງການພະລາທິການ, ຈາກນັ້ນທາງຝ່າຍເຮົາຍຶດອຳນາດ. ລຸງຊຽງກູ່ຖືກແຕ່ງຕັ້ງໃຫ້ໄປຍຶດອຳນາດຢູ່ເມືອງຄັນທະບູລີ. ລຸງຊຽງກູ່ເອົາທະຫານໄປກອງຮ້ອຍໜຶ່ງ, ໄປກໍ່ມີແຕ່ບາໄລເປົ່າ. ຊາວໜຸ່ມເມືອງຄັນທະບູລີມາເປັນກຳລັງນຳພວກລຸງຊຽງກູ່ 100 ປາຍຄົນເພື່ອເຂົ້າຍຶດອຳນາດ. ຫຼັງຈາກຍຶດອຳນາດໝົດແລ້ວລຸງຊຽງກູ່ກໍ່ຢູ່ຈັດຕັ້ງເມືອງ, ເພິ່ນຖືກເປັນຮອງເຈົ້າເມືອງ ແລະເປັນຮອງຄະນະພັກເມືອງ. ລຸງຊຽງກູ່ເຮັດວຽກນີ້ໄດ້ 2-3 ປີ. ຕໍ່ຈາກນັ້ນ ຮອດປີ 1978 ລຸງຊຽງກູ່ຖືກໄປບັນຊາພວກກົມລ້ຽງສັດຂອງແຂວງ ແລ້ວກໍ່ໄປຄວບຄຸມນັກໂທດຊຶ່ງເປັນໂຮງຮຽນບຳລຸງຢູ່ຕີນນາຫຼວງ. ຮອດປີ 1983 ລຸງຊຽງກູ່ກໍ່ອອກພັກຜ່ອນແລະກໍ່ພັກຜ່ອນຢູ່ຕີນນາຫຼວງນີ້ເລີຍ.

ກ່ຽວກັບການຮູ້ສຶກເພິ່ນວ່າ ການເຄື່ອນໄຫວການປະຕິວັດໃນໄລຍະຫຼາຍສິບປີຜ່ານມານີ້ ກໍ່ເພື່ອປົດປ່ອຍປະເທດຊາດໃຫ້ບ້ານເມືອງມີຄວາມເປັນເອກກະລາດ, ປະຊາຊົນເປັນເຈົ້າຂອງຕົນເອງຄືທຸກມື້ນີ້. ສຳລັບລຸງຊຽງກູ່ແລ້ວໄດ້ເຫັນປະເທດຊາດມີຜືນແຜ່ນດິນຄົບຖ້ວນ, ມີຄວາມຮັ່ງມີຄືທຸກມື້ນີ້ ແລະເຫັນປະຊາຊົນໄດ້ຢູ່ດີມີສຸກກໍ່ດີໃຈແລ້ວ. ນີ້ກໍ່ຄືຈຸດປະສົງຂອງການຕໍ່ສູ້ຍືດເຍື້ອຍາວນານ, ຄວາມເສຍສະຫຼະທຸກສິ່ງຢ່າງຂອງເພິ່ນ ແລະ ຂອງໝົດທຸກຄົນ. ສ່ວນການສະໜອງຂອງພັກລັດທີ່ມີຕໍ່ເພິ່ນກໍ່ຄືຄອບຄົວຂອງເພິ່ນນັ້ນ ເຖິງວ່າບໍ່ໄດ້ຕາມຄວາມຮຽກຮ້ອງຕ້ອງການກໍ່ຕາມ, ເພິ່ນເອງກໍ່ບໍ່ຂັດຂ້ອງ. ສິ່ງທີ່ເພິ່ນພູມໃຈ

---

126 ປົດກວນຕັນຕັ້ງຢູ່ບ້ານກວນຕັນ ເມືອງໄຊພູທອງ ແຂວງຄຳມ່ວນ.

ກໍຄືເພິ່ນໄດ້ມີຜົນງານຕໍ່ປະເທດຊາດ ແລະ ໄດ້ເຫັນໝາກຜົນຂອງການຕໍ່ສູ້ທີ່ເພິ່ນໄດ້ເຂົ້າຮ່ວມ. ໃນປະຈຸບັນ, ແຕ່ລະປີພັກລັດບໍ່ຖິ້ມບໍ່ປະເພິ່ນ, ພັກລັດກໍ່ຍັງມາຢ້ຽມຢາມຖາມຂ່າວ, ຊ່ວຍເຫຼືອເບິ່ງແຍງ ແລະ ເຊີນຮ່ວມກອງປະຊຸມນຳທຸກເທື່ອ.

ຊີວິດການຕໍ່ສູ້ຂອງລຸງຊຽງກູ່ເອງ ແມ່ນເປັນແນວນັ້ນແລ້ວ, ຜ່ານມາລຸງຊຽງກູ່ໄດ້ເລົ່າສູ່ລູກຫຼານເຂດນີ້ຮູ້ໝົດ. ເພິ່ນໄດ້ສັ່ງສອນລູກຫຼານໃຫ້ເອົາແບບຢ່າງຂອງຮຸ່ນຄົນທີ່ເຮັດກ່ອນ. ໃນປະຈຸບັນເຮືອນຂອງເພິ່ນເປັນເຮືອນນ້ອຍ ແຕ່ມີລູກ ແລະຫຼານຢູ່ເຕັມເຮືອນ. ເພິ່ນແລະເມຍບໍ່ມີລູກຂອງຕົນເອງ, ແຕ່ພວກເພິ່ນໄດ້ເອົາຫຼານມາລ້ຽງ ແລະ ຖືເປັນລູກຂອງຕົນ. ເວລານີ້ຢູ່ເຮືອນມີແຕ່ສອງຜູ້ເຖົ້າພວກເພິ່ນ, ສ່ວນຜູ້ໜຸ່ມ ເຂົາອອກໄປເຮັດການນຳພັກນຳລັດໝົດ, ພວກເຂົາເຮັດອາຊີບຫຼາຍຢ່າງ, ເຖິງວ່າແຕ່ລະຄົນຈະປະກອບສ່ວນໃຫ້ຊາດແຕກຕ່າງກັນກໍ່ຕາມແຕ່ຈຸດດີນັ້ນ ກໍ່ຄືທັງໝົດຮັບໃຊ້ປະເທດຊາດຮັບໃຊ້ ປະຊາຊົນບັນດາເຜົ່າ.

ລຸງຊຽງກູ່ເອງເຮັດການປະຕິວັດມາຫຼາຍປີ ລັດຖະບານກໍ່ເບິ່ງແຍງ ແລະ ໃຫ້ສິ່ງຕອບແທນເພິ່ນຫຼາຍຢ່າງຢູ່: ເພິ່ນໄດ້ຮັບຫຼຽນຕໍ່ຕ້ານໜຶ່ງໜ່ວຍ, ຫຼຽນໄຊ 2 ຫຼຽນ, ຫຼຽນກາອິດສະຫຼະໜຶ່ງຫຼຽນ ແລະ ໃບຍ້ອງຍໍ 3 ໃບ. ນອກຈາກນີ້ໃນແຕ່ລະປີ ເມື່ອເຖິງຍາມບຸນວັນຊາດມາ ທາງຄະນະພັກເມືອງເພິ່ນກໍ່ມາເຊີນລຸງຊຽງກູ່ເຂົ້າຮ່ວມສະເຫຼີມສະຫຼອງວັນດັ່ງກ່າວ ແລະໃຫ້ເພິ່ນເອງກໍ່ໄດ້ເລົ່າເຖິງປະຫວັດການຕໍ່ສູ້ຂອງນັກຮົບເກົ່າ ໃນເມື່ອກ່ອນໃຫ້ຮຸ່ນລູກຮຸ່ນຫຼານໄດ້ມາຮັບຮູ້ແຕ່ກໍ່ເປັນການເລົ່າເທົ່ານັ້ນບໍ່ໄດ້ບັນທຶກໄວ້ຄືເທື່ອນີ້. ເທື່ອນີ້ລຸງຊຽງກູ່ເຫັນພວກລູກຫຼານມາບັນທຶກໄວ້ດັ່ງນີ້ ເພິ່ນມີຄວາມດີໃຈຫຼາຍໃນການມາບັນທຶກຊີວິດການຕໍ່ສູ້ຂອງເພິ່ນເທື່ອນີ້ ແລະ ຈະເປັນສ່ວນໜຶ່ງໃນການບອກໃຫ້ລູກຫຼານໄດ້ຮັບຮູ້ເຖິງຂະບວນການຕໍ່ສູ້ຂອງປະຊາຊົນລາວ ຕ້ານກັບຈັກກະພັດໃນໄລຍະກ່ອນ.

ບົດສະຫຼຸບ

ຜ່ານການເລົ່າຄືນປະຫວັດຄວາມເປັນມາຂອງ ນັກວິລະກຳທັງ 10 ທ່ານ, ກໍ່ມີບົດຮຽນຫຼາຍຢ່າງທີ່ຂ້າພະເຈົ້າສາມາດຖອດຖອນໄດ້ຈາກພວກເພິ່ນ, ເຮັດໃຫ້ຂ້າພະເຈົ້າໄດ້ຮູ້ເຖິງຄວາມສຳຄັນຂອງການປະຕິວັດການຕໍ່ສູ້ຕ້ານກັບຈັກກະພັດລ່າເມືອງຂຶ້ນ ແລະມັນກໍ່ເປັນການຕໍ່ສູ້ ທີ່ມີຄວາມຍືດເຍື້ອຍາວນານທີ່ສຸດໃນປະຫວັດສາດຂອງຊາດລາວ.

ບັນດາຂໍ້ມູນທັງໝົດໃນປຶ້ມເຫຼັ້ມນີ້ ແມ່ນໄດ້ມາຈາກການເລົ່າຄືນຂອງນັກວິລະກຳ ສະໄໝກ່ອນຊຶ່ງເປັນຂໍ້ມູນທີ່ເກີດຂຶ້ນຢູ່ແທ້ຈິງ ແລະແຕ່ລະທ່ານກໍ່ເປັນຄົນທີ່ຢູ່ໃນຫຼາຍເຂດ ແລະ ມີຫຼາຍຊົນເຜົ່າທີ່ແຕກຕ່າງກັນ ແຕ່ມີສິ່ງໜຶ່ງທີ່ຄືກັນກໍ່ຄືທຸກຄົນລ້ວນແຕ່ມີພື້ນຖານ ເປັນຄົນມາຈາກຄອບຄົວທີ່ທຸກຍາກ ແລະຖືກກົດຂີ່ຂູດຮີດຈາກພວກລ່າເມືອງຂຶ້ນຝຣັ່ງ, ສິ່ງສຳຄັນກໍ່ຄື ພວກເຂົາຢາກອອກຈາກແອກຄອບຄອງ ຂອງພວກຈັກກະພັດລ່າເມືອງຂຶ້ນ, ດັ່ງນັ້ນ, ຈຶ່ງຕັດສິນໃຈເຂົ້າສູ່ການປະຕິວັດ ເພື່ອເຂົ້າຮ່ວມຂະບວນການຕໍ່ສູ້ກູ້ຊາດຕ້ານກັບພວກຈັກກະພັດ ທີ່ເຂົ້າມາຮຸກຮານ.

ປັດໄຈທີ່ເຮັດໃຫ້ພວກເພິ່ນຕັດສິນໃຈ ກ້າວເຂົ້າສູ່ຂະບວນການປະຕິວັດນັ້ນ ແມ່ນຍ້ອນ ພວກເພິ່ນບໍ່ສາມາດທົນຢູ່ໃນສະພາບທີ່ຖືກກົດຂີ່ຂູດຮີດຢ່າງໂຫດຮ້າຍປ່າເຖື່ອນຈາກພວກຈັກກະພັດລ່າເມືອງຂຶ້ນໄດ້ອີກຕໍ່ໄປ, ຍ້ອນສະພາບແວດລ້ອມ ຄວາມທຸກຍາກຂາດເຂີນໃນຄອບຄົວ ແລະ ຍ້ອນຄວາມເຊື່ອໝັ້ນຕໍ່ຂັ້ນເທິງ ກໍ່ຄືການນຳພາຂອງພັກ-ລັດ ວ່າຈະສາມາດຕີຖອຍສັດຕູຜູ້ຮຸກຮານໄດ້, ຊຶ່ງໃນທີ່ສຸດພວກເພິ່ນກໍ່ບໍ່ເສຍໃຈທີ່ຕັດສິນໃຈແບບນີ້ ຍ້ອນວ່າສຸດທ້າຍ ກໍ່ສາມາດຫຼຸດພົ້ນອອກຈາກແອກຄອບຄອງຂອງຈັກກະພັດລ່າເມືອງຂຶ້ນ ແລະ ປົດປ່ອຍປະເທດຊາດໄດ້ເປັນ ສາທາລະນະລັດ ປະຊາທິປະໄຕປະຊາຊົນລາວ.

ພາຍຫຼັງປະເທດຊາດໄດ້ຮັບການປົດປ່ອຍແລ້ວ, ໄດ້ເອກະລາດແລ້ວ,

ໄດ້ມີການສ້າງສາພັດທະນາແລ້ວ, ພວກເພິ່ນແຕ່ລະທ່ານໄດ້ຮັບຜົນປະໂຫຍດລວມທີ່ໃຫຍ່ຫຼວງທີ່ສຸດ ທີ່ປຶ້ມປະຫວັດສາດລາວໄດ້ບັນທຶກຈາລຶກໄວ້ນັ້ນກໍ່ຄື: ຊື່ສຽງຂອງແຕ່ລະທ່ານ, ຜົນງານຂອງແຕ່ລະທ່ານ, ສະຕິປັນຍາ ແລະຄວາມອົງອາດກ້າຫານ, ຄວາມເສຍສະຫຼະສ່ວນຕົວຂອງແຕ່ລະທ່ານທີ່ປະກອບສ່ວນເຂົ້າໃນຂະບວນການປະຕິວັດລາວອັນຍືດເຍື້ອຍາວນານ ຊຶ່ງເຕັມໄປດ້ວຍຄວາມທຸກຍາກລຳບາກຈົນສຸດທ້າຍໄດ້ຮັບໄຊຊະນະຢ່າງສົມບູນ, ພວກເພິ່ນໄດ້ຮັບນະໂຍບາຍຈາກພັກແລະລັດຄື: ແຕ່ລະທ່ານລ້ວນແຕ່ໄດ້ຮັບບັນດາຫຼຽນໄຊຫຼຽນກາ, ບັນດາໃບຍ້ອງຍໍຊັ້ນຕ່າງໆ ຈາກຂັ້ນຍ້ອງຍໍຕ່າງໆ ຕາມສາຍພັກແລະ ລັດ, ຕາມສາຍການຈັດຕັ້ງຂອງແຕ່ລະທ່ານຢ່າງສົມກຽດ. ໃນນີ້ຫຼາຍທ່ານກໍ່ໄດ້ກາຍເປັນນັກລົບແຂ່ງຂັນ, ການເປັນວິລະຊົນແຫ່ງຊາດ ແລະອື່ນໆ. ພ້ອມກັນນັ້ນພັກ ແລະ ລັດ ກໍ່ໄດ້ປະຕິບັດບັນດານະໂຍບາຍຕ່າງໆ ຕໍ່ພວກເພິ່ນຢ່າງສົມເຫດສົມຜົນເຊັ່ນ: ພວກເພິ່ນໄດ້ຮັບເງິນບຳນານ, ໄດ້ເງິນອຸດໜູນ, ໄດ້ລົດ ແລະ ເຮືອນຢູ່ຖາວອນ ຕາມນະໂຍບາຍ ແລະ ອື່ນໆ. ພັກ ແລະລັດກໍ່ຍັງໄດ້ເບິ່ງແຍງ ເວລາພວກເພິ່ນເຈັບໄຂ້, ພວກເພິ່ນມີເງິນສະຫວັດດີການປິ່ນປົວ. ພວກເພິ່ນຍັງໄດ້ຮັບເງິນເສຍອົງຄະຕາມປະເພດ. ເມື່ອມີທ່ານໃດໜຶ່ງໝົດອາຍຸໄປ ພັກ ແລະ ລັດ ກໍ່ໄດ້ປະຕິບັດນະໂຍບາຍຕໍ່ແຕ່ລະທ່ານຢ່າງເໝາະສົມ ກັບ ຊັ້ນ-ຂັ້ນ ແລະຖານະຕຳແໜ່ງ. ສຳລັບບາງທ່ານທີ່ບໍ່ທັນໄດ້ຮັບບາງນະໂຍບາຍນັ້ນພັກແລະລັດກໍ່ກຳລັງຈະສືບຕໍ່ຄົ້ນຄວ້າ ແລະ ຕອບສະໜອງດ້ານວັດຖຸ ແລະ ຈິດໃຈໃຫ້ທ່ານນັ້ນຢ່າງສົມເຫດສົມຜົນ.

ປະຈຸບັນ ບັນດາທ່ານໃນ 10 ທ່ານນັ້ນ ສ່ວນຫຼາຍໄດ້ຮັບນະໂຍບາຍຈາກ ພັກ-ລັດ ແລ້ວຄືດັ່ງເວົ້າຂ້າງເທິງນັ້ນ. ພວກເພິ່ນສ່ວນຫຼາຍແມ່ນໄດ້ຢູ່ໃນບັນດາຕົວເມືອງ ແລະ ຢູ່ແຄມທາງໃຫຍ່ປູຢາງ, ພວກເພິ່ນມີຄວາມສະດວກໃນການໄປມາ, ໃນການຜະລິດເສດຖະກິດຄອບຄົວ ແລະ ຄ້າຂາຍ. ຍັງແຕ່ລຸງອາອື່ງ ເຜົ່າປູຕີ ບ້ານອາຣໍ ເມືອງເຊໂປນ ຫາກໍ່ມີການປູຢາງຜ່ານແລ້ວ, ເພິ່ນກໍ່ໄດ້ມີຄວາມສະດວກສະບາຍໃນການໄປມາຄ້າຂາຍ, ໂດຍສະເພາະລູກຫຼານຂອງເພິ່ນກໍ່ໄດ້ເຂົ້າໂຮງຮຽນຢ່າງທົ່ວເຖິງ, ໃນປະຈຸບັນເວົ້າລວມແລ້ວ

ພວກເພິ່ນໄດ້ມີເງິນໃຊ້ຈ່າຍ, ໄດ້ມີເຂົ້າກິນ, ມີເຄື່ອງນຸ່ງຫົ່ມ, ມີພາຫະນະໃຊ້ສອຍໃນຄອບຄົວສະດວກສະບາຍຂຶ້ນ. ບາງຄອບຄົວ ກໍ່ໄດ້ກາຍເປັນຄອບຄົວແບບຢ່າງ ດ້ານການຜະລິດແລະດ້ານວັດທະນະທຳ,ມີຫຼາຍຄອບຄົວໄດ້ມີລູກຫຼານຮຽນສູງມີວິຊາຄວາມຮູ້ກາຍເປັນພະນັກງານທີ່ດີຂອງ ພັກ-ລັດ ແລະ ທະຫານ-ຕຳຫຼວດ, ຊຶ່ງເຂົາເຈົ້າພວມສ້າງບົດບາດແລະອິດທິພົນ ຂອງຕົນໃຫ້ນັບມື້ນັບດີຂຶ້ນເລື້ອຍໆເພື່ອສືບທອດພໍ່ແມ່ຕໍ່ໄປ. ກໍ່ຍັງມີບາງຄອບຄົວທີ່ພັກ ແລະ ລັດຍັງສືບຕໍ່ຄົ້ນຄວ້າ ແລະ ຈະປະຕິບັດນະໂຍບາຍ ທີ່ພວກເພິ່ນຍັງບໍ່ທັນໄດ້ຮັບນັ້ນ ຢ່າງສົມບົດສົມບາດ ສົມເຫດສົມຜົນ ຕໍ່ກັບຜົນງານຕົວຈິງ ທີ່ເພິ່ນໄດ້ເຮັດໃນຊຸມປີ ທີ່ເພິ່ນເຄື່ອນໄຫວເຮັດການປະຕິວັດຜ່ານມາ.

ຂ້າພະເຈົ້າຫວັງຢ່າງຍິ່ງວ່າ ຂໍ້ມູນຈາກປຶ້ມເຫຼັ້ມນີ້ຄົງຈະເປັນປະໂຫຍດ ແລະ ເປັນບົດຮຽນໃຫ້ແກ່ຄົນຮຸ່ນຫຼັງ ໄດ້ສຶກສາຮໍ່າຮຽນ ໄດ້ຮູ້ເຖິງປະຫວັດສາດຂອງຊາດລາວ ໂດຍສະເພາະປະຫວັດການຕໍ່ສູ້ອັນຍືດເຍື້ອຍາວນານກັບພວກຈັກກະພັດລ່າເມືອງຂຶ້ນ ເພື່ອປົດປ່ອຍປະເທດຊາດ ຂອງນັກວິລະກຳທັງໝົດນີ້ ຊຶ່ງມັນເປັນເລື່ອງທີ່ມີຄວາມລະອຽດອ່ອນ ແລະສຳຄັນທີ່ສຸດທີ່ໄດ້ຕັ້ງເອົາໃຈໃສ່ໃນການເລົ່າຄືນຄັ້ງນີ້, ແຕ່ຖ້າຫາກຍັງມີບ່ອນໃດ ທີ່ຂາດຕົກບົກພ່ອງ ຫຼື ບໍ່ຄົບຖ້ວນ ກໍ່ຂໍໃຫ້ຜູ້ອ່ານຮຸ່ນຕໍ່ໄປນຳເອົາໄປປັບປຸງ ແລະແກ້ໄຂໃຫ້ສອດຄ່ອງກັບສະພາບຕົວຈິງໃຫ້ດີຂຶ້ນຕື່ມອີກ.

ອາຈານ ຄຳໃບ ຍຸນດາລາ



ອຸປະຖຳໂດຍ THE TOYOTA FOUNDATION